# Laotian: Translation Words for Matthew

Formatted for Translators



generated on Thu Jul 10 08:45:04 2025

©2022 Wycliffe Associates
Released under a Creative Commons Attribution-ShareAlike 4.0 International License.

Bible Text: The English Unlocked Literal Bible (ULB)
©2017 Wycliffe Associates
Available at https://bibleineverylanguage.org/translations
The English Unlocked Literal Bible is based on the unfoldingWord® Literal Text, CC BY-SA 4.0. The original work of the unfoldingWord® Literal Text is available at https://unfoldingword.bible/ult/.
The ULB is licensed under the Creative Commons Attribution-ShareAlike 4.0 International License.

Notes: English ULB Translation Notes
©2017 Wycliffe Associates
Available at https://bibleineverylanguage.org/translations
The English ULB Translation Notes is based on the unfoldingWord translationNotes, under CC BY-SA 4.0. The original unfoldingWord work is available at https://unfoldingword.bible/utn.
The ULB Notes is licensed under the Creative Commons Attribution-ShareAlike 4.0 International License.

To view a copy of the CC BY-SA 4.0 license visit http://creativecommons.org/licenses/by-sa/4.0/

Below is a human-readable summary of (and not a substitute for) the license.
You are free to:

- Share — copy and redistribute the material in any medium or format.
- Adapt — remix, transform, and build upon the material for any purpose, even commercially.

The licensor cannot revoke these freedoms as long as you follow the license terms.
Under the following conditions:

- Attribution — You must attribute the work as follows: "Original work available at https://BibleInEveryLanguage.org." Attribution statements in derivative works should not in any way suggest that we endorse you or your use of this work.
- ShareAlike — If you remix, transform, or build upon the material, you must distribute your contributions under the same license as the original.
- No additional restrictions — You may not apply legal terms or technological measures that legally restrict others from doing anything the license permits.

Notices:
You do not have to comply with the license for elements of the material in the public domain or where your use is permitted by an applicable exception or limitation.
No warranties are given. The license may not give you all of the permissions necessary for your intended use. For example, other rights such as publicity, privacy, or moral rights may limit how you use the material.



# Translation Words

## "ຄົວເຮືອນ"

### ນິຍາມ

ຄຳວ່າ "ຄົວເຮືອນ" ໝາຍເຖິງທຸກຄົນທີ່ອາໄສຢູ່ນຳກັນໃນບ້ານຫລັງໜຶ່ງ, ລວມເຖິງສະມາຊິກຄອບຄົວແລະຄົນຮັບໃຊ້ທຸກຄົນທີ່ພວກເຂົາມີ.

- ຖ້າບາງຄົນບໍ່ລິຫານຈັດການໃນຄົວເຮືອນ ນີ້ອາດລວມເຖິງການສັ່ງການຄົນຮັບໃຊ້ເຊັ່ນດຽວກັບການເບິ່ງແຍງຊັບສິນດ້ວຍ.
- ບາງເທື່ອ "ຄົວເຮືອນ" ສາມາດມີຄວາມໝາຍເຊິ່ງປຽບທຽບໝາຍເຖິງລຳດັບວົງຕະກູນທັ້ງໝົດຂອງບາງຄົນ, ໂດຍສະເພາະລູກຫລານຂອງເຂົາ.

## "ເປໂຣ" ຫຼື "ພູເຂົາເປໂຣ"

### ຂໍ້ເທັດຈິງ

ຄຳວ່າ "ເປໂຣ" ຫຼື "ພູເຂົາເປໂຣ" ແມ່ນພູເຂົາຊຶ່ງຕັ້ງຢູ່ທາງທິດຕະເວັນອອກສຽງເໜືອຂອງທະເລເກືອ ໃນດິນແດນໂມອາບ

- "ເບັດເປໂຣ" ແມ່ນຊື່ເມືອງຕັ້ງຢູ່ເທິງພູເຂົາອາດໃກ້ບໍລິເວນໃກ້ກັບ
  ບ່ອນໂມເຊເສຍຊີວິດລົງຫຼັງຈາກທີ່ພຣະເຈົ້າຊົງໄດ້ຊີ້ໃຫ້ທ່ານເຫັນດິນແດນພັນທະສັນຍາ
- "ພະບາອານແຫ່ງເປໂຣ" ເປັນພະຫຽມຂອງຄົນໂມອາບທີ່ພວກທ່ານນະມັດສະການເທິງພູເຂົາເປໂຣ
  ຊາວອິດສະລາເອນເຄີຍນະມັດການຮູບເຄົາລົບນີ້ແລະພຣະເຈົ້າຊົງລົງໂທດພວກທ່ານເພາະການກະທຳນັ້ນ

## ກຣີກ,ຊາວກຣີກ

### ຂໍ້ເທັດຈິງ

ຄຳວ່າ "ກຣີກ" ອ້າງເຖິງພາສາທີ່ໃຊ້ເວົ້າໃນປະເທດກຣີດ. ພາສາກຣີກໃຊ້ເວົ້າຫົວອານາຈັກໂຣມ. ຄຳວ່າ "ຊາວກຣີກ"ໝາຍເຖິງ
ການເວົ້າພາສາກຣີກ".

- ເນື່ອງຈາກຄົນທີ່ບໍ່ແມ່ນຢິວສ່ວນຫລາຍໃນອານາຈັກໂຣມເວົ້າພາສາກຣີກ,ພວກຄົນຕ່າງຊາດຫລາຍຄັ້ງອ້າງເຖິງຄົນ"ກຣີກ"ໃນພັນທະສັນຍາໃໝ່,ສະເພາະ
- ຄຳເວົ້າ "ຄົນຢິວກຣີກ" ອ້າງເຖິງຄົນຢິວຜູ້ເວົ້າພາສາກຣີກເພື່ອໃຫ້ກົງກັນຂ້ວາມກັບ ຄຳວ່າ "ຄົນຢິວເຮັບເຣີ"
  ຜູ້ເວົ້າສະເພາະພາສາເຮັບເຣີຫລືພາສາອາຣັບ.
- ວິທີອື່ນໃນການແປ "ຊາວກຣີກ" ສາມາດລວມເຖິງ "ການເວົ້າພາສາກຣີກ" ຫລື "ກຣີກຕາມວັດທະນະທັມ" ຫລື "ກຣີກ".
- ເມື່ອອ້າງເຖິງພວກທີ່ບໍ່ແມ່ນຢິວ "ກຣີກ" ສາມາດແປວ່າ" ຄົນຕ່າງຊາດ".

## ກຣີດ

### ຂໍ້ເທັດຈິງ

ໃນສະໄໝພັນທະສັນຍາໃໝ່, ກຣີດເປັນເມືອງໃນອານາຈັກໂຣມ.

- ເຊັ່ນດຽວກັບປະເທດກຣີດສະໄໝໃໝ່, ປະເທດນີ້ຕັ້ງຢູ່ເທິງຄາບສະມຸດທີ່ອ້ອມດ້ວຍທະເລເມດິເຕຣານເນ,ທະເລເອຈຽນ,
  ແລະທະເລໄອໂອເນັຍ.
- ອັກຄະສາວົກໂປໂລໄດ້ຢ້ຽມຢາມເມືອງຕ່າງໆ ໃນກຣີດ.

ແລະຄຣິສະຕະຈັກໃນເມືອງໂກຣິນໂທ ເທຊະໂລນິກແລະເມືອງຟີລິບປອຍ ແລະບາງທີເມືອງອື່ນໆດ້ວຍ.

- ຄົນທີ່ມາຈາກກຣີດເອີ້ນວ່າ "ຄົນກຣີກ" ແລະພາສາຂອງພວກ"ເຂົາຄືພາສາກຣີກ." ມີຫລາຍຄົນຈາກເຂດໂຣມອື່ນໆ
  ກໍເວົ້າພາສາກຣີກດ້ວຍລວມທັ້ງຊາວຢິວຫລາຍຄົນ.
- ບາງຄັ້ງຄຳວ່າ "ຄົນກຣີກ"ກໍໃຊ້ອ້າງເຖິງຄົນຕ່າງປະເທດ.


generated on Thu Jul 10 08:45:04 2025

## ກວາງໂຕຜູ້ ກວາງໂຕເມັຍ, ກວາງພັນນ້ອຍໂຕຜູ້ , ກວາງຕົວນ້ອຍໆ ສີນ້ຳຕານອ່ອນ

### ນິຍາມ

ກວາງໂຕຜູ້ ຕົວໃຫ່ຍ, ທີສະຫງ່າງາມ, ເປັນສັດທີອາໄສຢູ່ໃນປ່າຫລື ເທິງພູ. ໂຕຜູ້ມີເຂົາຂນາດໃຫ່ຍ ເທິງຫົວຂອງມັນ.

- ຄຳວ່າ "ໂຕ" ໝາຍເຖິງກວາງໂຕເມັຍ ແລະ "ສີນ້ຳຕານອ່ອນ" ເປັນຊື່ຂອງກວາງທີເກີດທຳອິດ.
- ຄຳວ່າ "ບັກ" ເວົ້າເຖິງກວາງໂຕຜູ້.
- " ໂຣບັກ" ເປັນຕົວຜູ້ຂອງພັນສະເພາະ ເອີນກັນວ່າ " ໂຣເດ້ຽ "
- ກວາງ ມີ ຂາຮຽວນ້ອຍ ທີແຂງແຮງ, ຊ່ວຍໃຫ້ພວກມັນເຕ້ັນກະໂດດສູງ ແລະ ວີງເຕ້ັນໄວ.
- ຕີນຂອງພວກມັນ ມີກີບແຍກ ທີຊ່ວຍໃຫ້ພວກມັນຍ່າງ ຫລືປີ້ນຂຶ້ນໄປໄດ້ຢ່າງງ່າຍດາຍ ໃນພູມມີປະເທດເກືອບທຸກປະເທດ.

## ກະຈັດກະຈາຍ, ການກະຈັດກະຈາຍ

### ນິຍາມ

ຄຳວ່າ "ກະຈັດກະຈາຍ" ແລະ "ການກະຈັດກະຈາຍ" ກ່າວເຖິງການກະເຈີດກະເຈີງຂອງຄົນ ຫຼືສິ່ງຕ່າງໆ ໄປໃນທິດທາງຕ່າງໆ.

- ໃນພັນທະສັນຍາເດີມ,ພຣະເຈົ້າເວົ້າເຖິງ "ການກະຈາຍ"
  ຄົນ,ທຳໃຫ້ພວກເຂົາໄດ້ແຍກຕົວແລະອາໄສຢູ່ໃນສະຖານທີແຕກຕ່າງກັນອອກໄປ.ພຣະອົງກະທຳຢ່າງນີເພືອລົງໂທດພວກເຂົາເພາະຄວາມບາບຂອງພວກເ
- ຄຳວ່າ "ກະຈັດກະຈາຍ"
  ໃຊ້ໃນພັນທະສັນຍາໃໝ່ເພືອອ້າງອີງເຖິງຄຣິດສະຕຽນທີໄ້ອງອອກຈາກບ້ານຂອງພວກເຂົາແລະໄປຍັງສະຖານທີຕ່າງໆ
  ເພືອໝີການກົດຂີຂ່ືມເຫັງ.
- ຄຳເວົ້າ "ການກະຈັດກະຈາຍ" ສາມາດແປເປັ້ນ "ຜູ້ສັດທາໃນທີຫຼາຍໆແຫ່ງ" ຫຼື "ຄົນທີຍ້າຍອອກໄປອາໃສຢູ່ໃນປະເທດຕ່າງ".
- ຄຳວ່າ "ກະຈັດກະຈາຍ" ອາດແປວ່າ "ສິ່ງໄປຢູ່ໃນສະຖານທີຕ່າງໆ" ຫຼື "ກະຈາຍຢູ່ໃນຕ່າງປະເທດ" ຫຼື
  "ທຳໃຫ້ຍ້າຍອອກໄປອາໃສຢູ່ໃນປະເທດຕ່າງໆ".

## ກະຈັບປີ

### ນິຍາມ

ຜ້ນເປັ້ນເຄືອງດ້ນຕີປະເພດສາຍ ຊ່ືງມັກຈະເປັ້ນໂຄງຂະໜາດໃຫຍ່,ຊ່ືງສູນກາງເປ່ີດໂລ່ງແລະມີສາຍຫລາຍເສ້ັນເຂ່ືງເປັ້ນແນວຕ້ັງ.

- ໃນສະໄໝພຣະຄຳພີ, ໄມ້ຕ້ີນສ້ນມັກຈະຖ່ືກໃຊ້ໃນການເຮ້ັດຜ້ນແລະເຄືອງດ້ນຕີອ່ືນໆ.
- ຫລາຍເຫ່ືອນ້ັກດ້ນຕີມ້ັກຈະຖ່ືຜ້ນໄວ້ໃນມ່ືແລະບ້ັນເລ່ືງໃນຂະນະທ່ີຍ່າງໄປ.
- ມ່ີຫລາຍແຫ່ງໃນພຣະຄຳພີ, ຜ້ນມ້ັກຈະຖ່ືກກ່າວເຖ່ືງວ່າເປັ້ນເຄ່ືອງມ່ືທ່ີໃຊ້ໃນການສ້ັນລະເສ້ີນແລະການນະມ້ັດສະການພຣະເຈ້ົາ.
- ດາວ່ິດໄດ້ບ້ັນທ่ຶກເພ່ືງສ້ັນລະເສ້ີນຫລາຍບ່ົດເພ່ືງ ຊ່ືງສ່ຳລ້ັບໃຊ້ຮ້ອງກ້ັບເຄ່ືອງດ້ນຕີຜ້ນ.
- ທ່ານໄດ້ຫລ່ືນຜ້ນສ່ຳລ້ັບກະສ້ັດຊາອ້ນເພ່ືອຊ່ວຍທ່ຽນຄາຍບ້ັນຫາລ້ົບກວນຈ່ິດໃຈຂອງກະສ້ັດ.

## ກະຕ່າ

### ນິຍາມ

ຄຳວ່າ“ ກະຕ່າ” ໝາຍເຖ່ືງພາຊະນະທ່ີເຮ້ັດຈາກໄມ້ເປັ້ນວ້ັດສະດຸທ່ີສານຕ່ໍກ້ັນ.

- ໃນສະໄໝພຣະຄຳພີ, ກະຕ່າອາດຖ່ືກມ້ັດດ້ວຍໄມ້ທ່ີແຂງແຮງ, ເຊ້ັນວ່າ ໄມ້ ຈາກ່ງ່າໄມ້ທ່ີປອກເປ່ືອກຫລ່ືກ່ົງ່ງ່າ.
- ກະຕ່າສາມາດເຄ່ືອບດ້ວຍສານກ້ັນ້ ຳເພ່ືອໃຫ້ມ້ັນລອຍໃນນ້ ຳໄດ້.
- ເມ່ືອໂມເຊຍ້ັງເປັ້ນເດ້ັກນ້ອຍ, ແມ່ຂອງລາວໄດ້ເຮ້ັດກະຕ່າເລ້ັວກະສານກ້ັນ້
  ˚ ຳເພ່ືອເອ່ົາລາວລ່ົງແລະລອຍຢູ່ໃນບ້ັນດາຕ້ົນຫຍ້ າທ່ີຢູ່ໃນແມ່ນ້ ຳ.
- ຄຳທ่ີແປວ່າ“ ກະຕ່າ” ໃນເລ່ືອງນ້ັນແມ່ນຄຳດຽວກ້ັນທ่ີແປວ່າ“ ຫ່ີບ”
  ໂດຍອ້າງເຖ່ືງເຮ່ືອທ่ີໂມເຊສ້ ຳ້ າງຄວາມໝາຍທ ຳ ມ ະ ດ າ ຂ ອ ງ ກ ານ ນ ຳ ໃ ຊ້ ມ ້ ນ ໃ ນ ສ ອ ງ ສ ະ ພ າ ບ ກ ານ ດ ້ ົ ງ ກ ່ າ ວ ອ າ ດ ແ ມ ່ ນ "ພ າ ຊ ະ ນ ະ ລ ອ ຍ ນ ຳ
  ˚."


generated on Thu Jul 10 08:45:04 2025

## ກະທຳຜິດ, ເຮັດບໍ່ດີຕໍ່, ທຳຮ້າຍ

### ນິຍາມ

ການ "ການກະທຳຜິດ" ຕໍ່ບາງຄົນໝາຍເຖິງການປະຕິບັດຕໍ່ບຸກຄົນນັ້ນຢ່າງບໍ່ຍຸດຕິທຳແລະຢ່າງບໍ່ສັດຊື່.

- ຄວາມເວົ້າວ່າ "ການເຮັດບໍ່ດີ" ໝາຍຄວາມວ່າການກະທຳທີ່ບໍ່ດີຫຼືຫຍາບຊ້ຳຕໍ່ຄົນບາງຄົນ
  ເປັນການທຳຮ້າຍຮ່າງກາຍຫຼືອາລົມຂອງບຸກຄົນນັ້ນ.
- ຄວາມເວົ້າວ່າ "ການທຳຮ້າຍ" ເປັນຄຳທີ່ໃຊ້ທົ່ວໄປແລະໝາຍຄວາມວ່າ "ເປັນເຫດໃຫ້ບາງຄົນຖືກທຳຮ້າຍໃນທຸກວິທີທາງ."
  ໂດຍທົ່ວໄປຈະມີຄວາມໝາຍວ່າ "ເຮັດໃຫ້ບາດເຈັບທາງຮ່າງກາຍ."
- ຂຶ້ນຢູ່ກັບກໍລະນີ, ຄຳນີ້ໝາຍຄວາມວ່າ "ທຳຜິດຕໍ່" ຫຼື "ກະທຳບໍ່ຍຸດຕິທຳຕໍ່" ຫຼື "ເປັນເຫດໃຫ້ເກີດການທຳຮ້າຍແກ່" ຫຼື "ທຳບໍ່ດີ
  ໃນທາງທີ່ເປັນອັນຕະລາຍ" ຫຼື "ທຳຮ້າຍ."

## ກະຣິດ ກະເຣຕັນ

### ຂໍ້ເທັດຈິງ

ກະຣິດເປັນເກາະທີ່ຫ່ຶງຢູ່ນອກຊາຍຝັ່ງທາງຕອນໃຕ້ຂອງປະເທດກະຣິດ"ກະເຣຕັນ" ຄືຄົນທີ່ອາສັຍຢູ່ເທິງເກາະແຫ່ງນີ.

- ອັກຄະສາວົກ ໂປໂລໄດ້ເດີນທາງໄປທີ່ເກາະກະຣິດ ໃນລະຫວ່າງການເດີນທາງເພື່ອການເຜີຍແຜ່ສາດສະໜາຂອງທ່ານ.
- ໂປໂລໄດ້ຖືມເພື່ອນຮ່ວມງານຂອງທ່ານ ຄືຕີໂຕ
  ໄວ້ທີ່ເກາະກະຣິດເພື່ອສອນຄຣິດສະຕຽນແລະຊ່ວຍແຕ່ງຕ້ັງພວກຜູ້ນຳຄຣິດສະຕະຈັກທີ່ນັ້ນ.

## ກະສັດ

### ນິຍາມ

ຄຳວ່າ "ກະສັດ" ກ່າວເຖິງ ການຂຽນບັນທຶກເຫດການໃນຊ່ວງລະຍະເວລາໜຶ່ງ.

- ພຣະທຳໃນພັນທະສັນຍາເດີມສອງເຫ້ົ້ລ່ມທີ່ມີຊື່ວ່າ "ພຣະທຳ1ກະສັດ" ແລະພຣະທຳກະສັດສະບັບທີ2"
- ພຣະທຳທີ່ຊື່ວ່າ "ກະສັດ" ໄດ້ບັນທຶກສ່ວນໜຶ່ງຂອງປະຫວັດສາດຂອງຊົນຊາດອິສະຣາເອນ
  ເລີ່ມດ້ວຍລາຍຊື່ຂອງຜູ້ຄົນໃນທຸກຊົ່ວອາຍຸຄົນຕ້ັງແຕ່ອາດາມ.
- ພຣະທຳກະສັດສະບັບທີ1 "ບັນທຶກບັນປາຍຊີວິດຂອງກະສັດຊາອູນ ແລະເຫດການໃນສະໄໝກະສັດດາວິດຊົ່ງຄອງຣາຊ.
- ພຣະທຳກະສັດສະບັບທີ2 "ບັນທຶກການຄອງຣາຊຂອງກະສັດໂຊໂລໂມນແລະກະສັດອີຫລາຍອົ່ງ
  ລວມທ້ັງການສ້ົ້ງພຣະວິຫານແລະການແຕກແຍກຂອງອານາຈັກອິສະຣາເອນ

ຝ່າຍເໜືອອອກຈາກອານາຈັກຝ່າຍໃຕ້.

- ຕອນຈົ່ບຂອງພຣະທຳກະສັດສະບັບທີ2 ໄດ້ອະທິບາຍເຖິງຈຸດເລີ່ມຕ້ົນຂອງການຖືກຈັບໄປເປັນສະເລີຍທີ່ບາບີໂລນ.

## ກະສັດ

### ນິຍາມ

ຄຳວ່າ "ກະສັດ" ໝາຍເຖິງຜູ້ຊາຍທີ່ເປັນຜູ້ປົກຄອງສູງສຸດຂອງເມືອງໜ່ຶ ຫລື ປະເທດໜຶ.

- ໂດຍປົກກະຕິແລ້ວກະສັດຈະຖືກເລືອກມາປົກຄອງເພາະວ່າຄອບຄົວຂອງເຂົາມີຄວາມກ່ຽວຂ້ອງກັບກະສັດຫລາຍພຣະອົ່ງກ່ອນໜ້ານ້ັນ.
- ເມືອກະສັດສິ້ນພະຊົນ ໂດຍປົກກະຕິແລ້ວລູກຊາຍກ໊ກຈະມາເປັນກະສັດອົ່ງຕໍ່ໄປ.
- ໃນສະໄໝພຣະຄຳພີເດີມ ກະສັດມີອຳນາດອິກຄອງຢ່າງແທ້ຈິ່ງຕໍ່ປະຊາຊົນຂອງພະອົ່ງ.
- ຄຳວ່າກະສັດອາດໝາຍເຖິງຄົນທີ່ບໍ່ແມ່ນກະສັດທີ່ແທ້ຈິ່ງຢ່າງເຊ້ັນ "ກະສັດເຮໂຣດ" ໃນພຣະຄຳພີໃໝ່.
- ໃນພຣະຄຳພີພຣະເຈ້ົ້າມ້ັກຈະຖືກກ່າວເຖິງວ່າເປັນກະສັດເໜືອປະຊາຊົນຂອງພຣະອົ່ງ.
- ພຣະເຢຊູໄດ້ຖືກເອີ້ນວ່າ "ກະສັດຂອງຊາວຢິວ","ກະສັດຂອງອິດສະຣາເອນ" ແລະ "ກະສັດຂອງກະສັດ".
- ເມືອພຣະເຢຊູສະເດັດກັບມາ ພຣະອົ່ງຊົ່ງປົກຄອງໃນຖານະກະສັດເໜືອທ້ັງໂລກ.
- ຄຳນີ້ຍັ່ງສາມາດແປໄດ້ອີກວ່າ "ຫ້ົວໜ້າສູງສຸດ" ຫລື "ຜູ້ນຳສູງສຸດ" ຫລື "ຜູ້ປົກຄອງຜູ້ມີອຳນາດສູງສຸດ".


generated on Thu Jul 10 08:45:04 2025

- ປະໂຫຍກທີ່ວ່າ "ກະສັດເໜືອກະສັດທັ້ງຫມົດ" ສາມາດແປວ່າ "ກະສັດຜູ້ປົກຄອງເໜືອກະສັດອື່ນ" ຫລື "ຜູ້ປົກຄອງສູງສຸດຜູ້ມີອໍານາດສຸດຂາດເໜືອຜູ້ປົກຄອງອື່ນໆ".

## ກະສັດຂອງພວກຢິວ

### ນິຍາມ

ຄໍາວ່າກະສັດຂອງພວກຢິວເປັນຕໍາແໜ່ງທີ່ອ້າງເຖິງ ພຣະເຢຊູ, ພຣະເມຊີອາ.

- ຄັ້ງທໍາອິດທີ່ຕໍາແໜ່ງນີ້ໄດ້ຮັບການບັນທຶກໃນພຣະຄໍາພີຄືເມື່ອນັກປາດຜູ້ທີ່ເດີນທາງໄປຍັງເບດເລເຮັມເພື່ອຕາມຫາເດັກເກີດໃໝ່ຜູ້ເປັນ "ກະສັດຂອງພວກຢິວ."
- ທູດສະຫວັນເປີດເຜີຍຕໍ່ມາຣີວ່າ ລູກຊາຍຂອງລາວຜູ້ເປັນເຊື້ອສາຍຂອງກະສັດດາວິດຈະເປັນກະສັດອົງໜຶ່ງທີ່ຄອບຄອງຈົນຕະຫຼອດໄປເປັນນິດ.
- ກ່ອນພຣະເຢຊູຖືກຄຶງ ພວກທະຫານໂຣມເວົ້າລໍ້ຫຼັ້ນພຣະເຢຊູວ່າ "ກະສັດຂອງພວກຢິວ" ຕໍາແໜ່ງນີ້ຖືກຂຽນໄວ້ເທິງແຜ່ນໄມ້ແລະຕອກຕະປູຕິດໄວ້ເທິງໄມ້ກາງແຂນຂອງພຣະເຢຊູ.
- ພຣະເຢຊູຊົ່ງເປັນກະສັດທີ່ແທ້ຈິງຂອງພວກຢິວແລະຊົ່ງເປັນກະສັດເໜືອສິ່ງຊົ່ງສ້າງທັ້ງປວງ.

%ຄໍາແນະນໍາໃນການແປ

- ຄໍາວ່າ "ກະສັດຂອງພວກຢິວ"ສາມາດແປໄດ້ວ່າ"ກະສັດເໜືອພວກຢິວ "ຫຼື" ກະສັດຜູ້ປົກຄອງເໜືອພວກຢິວ "ຫຼື" ຜູ້ປົກຄອງສູງສຸດເໜືອພວກຢິວ"
- ກວດສອບເບິ່ງວິທີການແປປະໂຫຍກ "ກະສັດຂອງ" ໃນຕອນອື່ນໃນການແປດ້ວຍ.

## ກັບຄືນ

### ນິຍາມ

ຄໍາວ່າ "ກັບຄືນ" ໝາຍເຖິງການກັບໄປຫາຫຼືໃຫ້ສິ່ງໃດສິ່ງໜຶ່ງກັບຄືນ.

- ເພື່ອ“ ກັບຄືນສູ່” ບາງສິ່ງບາງຢ່າງໝາຍຄວາມວ່າເລີ່ມຕົ້ນເຮັດກິດຈະ ກໍາ ນັ້ນອີກ.
- ເມື່ອຊາວອິສະຣາເອນກັບຄືນສູ່ການນະມັດສະການຮູບເຄົາລົບ, ພວກເຂົາກໍເລີ່ມນະມັດສະການພວກນັ້ນອີກ.
- ໃນເວລາທີ່ພວກເຂົາກັບຄືນສູ່ ພຣະເຈົ້າຢາເວ, ພວກເຂົາໄດ້ກັບໃຈແລະໄດ້ນະມັດສະການ ພຣະເຈົ້າຢາເວອີກຄັ້ງ.
- ການທີ່ຈະສົ່ງຄືນທີ່ດິນຫລືສິ່ງຂອງທີ່ຖືກເອົາຫຼືໄດ້ຮັບຈາກຜູ້ອື່ນ ໝາຍຄວາມວ່າຈະມອບຊັບສິນນັ້ນຄືນໃຫ້ບຸກຄົນທີ່ເປັນເຈົ້າຂອງ.
- ຄໍາວ່າ "ກັບຄືນ" ສາມາດແປເປັນ, "ກັບຄືນ" ຫລື "ໃຫ້ຄືນ" ຫຼື"ເລີ່ມຕົ້ນເຮັດອີກເທື່ອ ໜຶ່ງ."

## ກັບໃຈ, ການກັບໃຈ

### ນິຍາມ

ຄໍາວ່າ "ກັບໃຈ" ແລະ "ການກັບໃຈ" ໝາຍເຖິງການຫັນໜີຈາກບາບແລະຫັນກັບມາຫາພຣະເຈົ້າ.

- ການກັບໃຈ "ກັບໃຈ" ໝາຍ ເຖິງ "ການປ່ຽນໃຈຂອງຄົນເຮົາ."
- ໃນພຣະຄໍາພີ, "ການກັບໃຈ" ໂດຍປົກກະຕິ ໝາຍ ເຖິງການຫັນ ໜີຈາກແນວຄິດທີ່ຜິດແລະການກະທໍາຂອງມະນຸດ, ແລະຫັນໄປສູ່ແນວຄິດແລະການກະ ທໍາ ຂອງພຣະເຈົ້າ.
- ເມື່ອຜູ້ຄົນກັບໃຈຈາກບາບຂອງພວກເຂົາຢ່າງແທ້ຈິງ, ພຣະເຈົ້າຈະໃຫ້ອະໄພຍພວກເຂົາແລະຊ່ວຍພວກເຂົາເລີ່ມເຊື່ອຟັງພຣະອົງ.

### ຄໍາແນະນໍາໃນການແປ

- ຄໍາວ່າ, "ກັບໃຈ" ສາມາດແປກັບ ຄໍາເວົ້າຫລືປະໂຫຍກທີ່ມີຄວາມ ໝາຍ ວ່າ "ຫັນກັບຄືນ.


generated on Thu Jul 10 08:45:04 2025

## ກາຊາ

### ຂ້ເທັດຈິງ

ໃນລະຫວ່າງເວລາຂອງພຣະຄັມພີ,ກາຊາ ເປັນເມືອງທີ່ຮຸ່ງເຮືອງຂອງຊາວຟີລິດສະຕີນ ຕັ້ງຢູ່ທີ່ຊາຍຝັ່ງທະເລເມດິແຕຣາເນ, ປະມານ38 ກິໂລແມັດ ຈາກທາງໃຕ້ຂອງອັດຊາໂດນ. ເປັນເມືອງນຶ່ງໃນຫ້າເມືອງຫຼັກຂອງຊາວຟີລິດສະຕີນ.

- ເພາະທະເລທີຕັ້ງຂອງເມືອງ,ກາຊາ
  ເປັນທ່າເຮືອກະແຈສຳຄັນໃນເລື່ອງການຄ້າຊຶ່ງເກີດຂຶ້ນລະຫວ່າງປະຊາຊົນຈຳນວນຫລາຍແລະຈາກຫລາຍປະເທດ.
- ປະຈຸບັນ,ເມືອງກາຊາຍັງຄົງເປັນເມືອງທ່າທີ່ສຳຄັນໃນຕາມແຄມຝັ່ງຂອງກາຊາ,ຊຶ່ງເປັນຜືນແຜ່ນດິນທີ່ຕັ້ງຢູ່ຕາມແນວຊາຍຝັ່ງຂອງທະເລ ເມດິແຕຣາເນ ຊຶ່ງມີຄົນອິສະຣາເອນທາງເໜືອແລະຕາເວັນອອກ, ແລະທາງໃຕ້ມີເອຢິບ.
- ກາຊາ ຄືເມືອງທີ່ຊາວຟີລິດສະຕີນເອົາຕົວແຊມຊັ່ນໄປ ຫລັງຈາກທີ່ພວກເຂົາຈັບແຊມຊັ່ນແລ້ວ.
- ຟີລິບ ນັກປະກາດໄດ້ຍ່າງຕາມຖະໜົນທະເລຊາຍໄປຍັງເມືອງ

ກາຊາ ເມືອເຂົາພົບຂັນທີ ຊາວເອທີໂອເປຍ.

## ກາຍຊາເຣຍ, ກາຍຊາເຣຍ ຟີລິບປອຍ

### ຂ້ເທັດຈິງ

ກາຍຊາເຣຍເປັນເມືອງສຳຄັນທີ່ມີຫາດຊາຍຕິດກັບທະເລເມດິເຕຣາເນ ຢູ່ທາງພາກໃຕ້ຂອງພູເຂົາກາເມນປະມານ 39 ກິໂລແມັດ. ກາຍຊາເຣຍ ຟີລິບປອຍ ເປັນເມືອງໜຶ່ງທີ່ຢູ່ພາກເໜືອຂອງອິດສະຣາເອນ ຊຶ່ງຢູ່ໃກ້ພູເຂົາເຮີໂມນ.

- ເມືອງເຫລົ່ານີ້ໄດ້ຮັບການຕັ້ງຊື່ຕາມກະສັດທີ່ຄອບຄອງຂອງຈັກກະພັດໂຣມັນ.
- ກາຍຊາຣີຢາ ທີ່ຢູ່ແຄມຝັ່ງທະເລກາຍເປັນເມືອງເອກຂອງແຄວ້ນຢູເດຍ ໃນຊ່ວງເວລາໃກ້ກັບພຣະເຢຊູລົງມາບັງເກີດ.
- ອັກຄະສາວົກເປໂຕເປັນຜູ້ເທດສະໜາຜູ້ທຳອິດໃຫ້ແກ່ຕ່າງດ້າວໃນກາຍຊາເຣຍຝັ່ງ.
- ໂປໂລໄດ້ລ່ອງເຮືອຈາກເມືອງກາຍຊາເຣຍໄປຍັງເມືອງທາຊັດຜ່ານເມືອງນີ້ໃນການເດີນທາງປະກາດຄັ້ງທີ່ສອງ.
- ພຣະເຢຊູແລະພວກສາວົກຂອງພຣະອົງໄດ້ເດີນທາງໃນເຂດແດນ ກາຍຊາເຣຍ ຟີລິປອຍ. ໃນແຂວງຊີເຣຍ ທັ້ງສອງເມືອງນີ້ຖືກຕັ້ງຊື່ມາ ຈາກກະສັດເຮໂຣດ ຟີລິບ.

## ກາຍຊາ

### ຂ້ເທັດຈິງ

ຄຳວ່າ " ກາຍຊາ "ແມ່ຊື່ຫລືຕຳແໜ່ງຜູ້ປົກຄອງຈັກກະພັດໂຣມຫລາຍຄົນນຳກັນ. ໃນພຣະຄຳ, ຊື່ນີ້ໝາຍເຖິງຜູ້ປົກຄອງໂຣມັນສາມ ຄົນທີ່ແຕກຕ່າງກັນ.

- ຜູ້ປົກຄອງໂຣມັນຄົນທຳອິດມີຊື່ວ່າ ກາຍຊາ ແມ່ນ "ກາຍຊາ ໂອຄຸໂຕ," ທີ່ປົກຄອງໃນຊ່ວງເວລາພຣະເຢຊູບັງເກີດ.
- ປະມານ 30 ປີຕໍ່ມາ ເປັນຊ່ວງເວລາທີ່ໂຢຮັນບັບຕິສະໂຕກຳລັງເທດສະໜານັ້ນ, ເປັນຊ່ວງເວລາດຽວກັບ ທ່ານທີເບີຣີອັສ ເປັນຜູ້ປົກ ຄອງອານາຈັກໂຣມັນ.
- ທ່ານທີເບີຣີອັສ ກາຍຊາ ຍັງເປັນຜູ້ປົກຄອງນະຄອນໂຣມທີ່ພຣະເຢຊູບອກໃຫ້ປະຊາຊົນເສຍພາສີໃຫ້ກາຍຊາທີ່ເປັນຂອງກາຍຊາ ແລະ ຖວາຍໃຫ້ພຣະເຈົ້າສິ່ງທີ່ເປັນຂອງພຣະເຈົ້າ.
- ເມືອໂປໂລເສຍພາສີໃຫ້ກາຍຊາ ນີ້ໝາຍເຖິງຈັກກະພັດນີໂຣຜູ້ມີຕຳແໜ່ງເປັນ "ກາຍຊາ" ນັ້ນ.
- ຄຳວ່າ "ກາຍຊາ" ແມ່ນໃຊ້ບອກເຖິງຕຳແໜ່ງໃນຕົວມັນເອງ, ຄຳນີ້ສາມາດແປວ່າ "ຈັກກະພັດ" ຫລື " ຜູ້ປົກຄອງຊາວໂຣມມັນ.
- ພາຍໃນຊື່ ກາຍຊາ ໂອຄຸໂຕ ຫລື ທີເບີຣີອັສ ຄຳວ່າ " ກາຍຊາ " ສາມາດຂຽນພາສາກາງໃຊ້ສະກົດຄຳນີ້.

## ກາດ

### ຂ້ເທັດຈິງ

ກາດ ເປັນຊື່ນຶ່ງ ໃນບຸດຊາຍຂອງ ຢາໂຄບ, ຫຼື ອິສະຣາເອນ.

- ຕະກຸນຂອງ ກາດ ກາຍເປັນນຶ່ງໃນສິບສອງຊົນເຜົ່າຂອງຊົນຊາດອິສະຣາເອນ.
- ມີຊາຍຄົນນຶ່ງໃນພຣະຄັມພີຊື່ ກາດ ເປັນຜູ້ປະກາດພຣະທັມຜູ້ທີ່ເຊ ເຊີນໜ້າກັບກະສັດ ດາວິດ ເລື່ອງຄວາມບາບຂອງ ດາວິດ ທີ່ທຳການສຳຫຼວດສຳມະໂນຄົວປະຊາຊົນຂອງປະຊາຊົນ ອິສະຣາເອນ.


generated on Thu Jul 10 08:45:04 2025

- ເມືອງບາຣາອາມກາດແລະມີກດານກາດ ເປັນຄໍາສອນໃນພຣະຄໍາພີຕົ້ນສະບັບແລະບາງຄັ້ງກໍຂຽນວ່າ, " ບາອາມ ກາດ " ແລະ " ມີກດານ ກາດ. "

## ກາດ

### ຂ້ເທັດຈິງ

ກາດ ຄືນຶ່ງໃນຫ້າເມືອງຫຼັກຂອງຊົນຊາດຟີລິດສະຕີນ.
ຕັ້ງຢູ່ທາງທິດເໜືອຂອງເມືອງເອຄະໂຣນແລະທິດຕາເວັນອອກຂອງເມືອງອັດໂດດແລະອັດສະເຄໂລນ.

- ນັກຮົບຊາວຟີລິດສະຕີນຊື່ຂອງໂກລີອາດ ມາຈາກເມືອງກາດ.
- ລະຫວ່າງເວລາຂອງຊາມູເອນ,
  ຄົນຟີລິດສະຕີນໄດ້ຂະໂມຍຫີບພັນທະສັນຍາຈາກປະຊາຊົນອິສະຣາເອນແລະເອົາໄປໄວ້ໃນພຣະວິຫານຂອງພຣະເຈົ້າ
  ຄົນນອກສາສນາຂອງພວກເຂົາທີ່ອັດສະໂດດ. ແລ້ວກໍໄດ້ຍ້າຍໄປທີ່ກາດແລະຕໍ່ມາກໍໄດ້ຍ້າຍໄປທີ່ເອກະໂຣນ.
  ແຕ່ພຣະເຈົ້າຊົງລົງໂທດຄົນຂອງເມືອງນັ້ນດ້ວຍໂຣກຮ້າຍ,
  ດັ່ງນັ້ນພວກເຂົາຈຶ່ງໄດ້ສົ່ງຫີບແຫ່ງພັນທະສັນຍາກັບມາທີ່ຊົນຊາດອິສະຣາເອນອີກຄັ້ງ.
- ເມື່ອດາວິດໄດ້ໜີຈາກກະສັດຊາມູເອນ,
  ພຣະອົງໄດ້ໜີໄປທີ່ເມືອງກາດແລະຢູ່ທີ່ນັ້ນໜ້ອຍໜຶ່ງກັບເມຍຂອງເພິ່ນສອງຄົນແລະທະຫານອີກຫົກຮ້ອຍຄົນແລະຜູ້ທີ່ຈົງຮັກພັກດີຕໍ່ພຣະອົງ.

## ການກັນດານອາຫານ ຫລື ການອຶດອາຫານ

### ນິຍາມ

ຄໍາວ່າ "ການກັນດານອາຫານ" ແມ່ນເວົ້າເຖິງການຂາດແຄນອາຫານຢ່າງຮຸນແຮງຕະຫລອດທັ້ງປະເທດຫລືຜູ້ມີພາກ
ຕາມປົກກະຕິແລ້ວແມ່ນເກີດຈາກຂໍ້ມີນ້ໍາຝົນທີ່ພຽງພໍ.

- ພືດຜົນສາມາດເສຍຫາຍໄດ້ເພາະສາຍເຫດທາງທໍາມະຊາດເຊັ່ນ ຝົນແລ້ງ ພືດເປັນພະຍາດ ຫລືຖືກແມງໄມ້ທໍາລາຍ.
- ການຂາດແຄນອາຫານມີສາຍເຫດເນື່ອງມາຈາກປະຊາຊົນເຊັ່ນ ສັດຕູໄດ້ທໍາລາຍພືດພັນ.
- ໃນພຣະຄໍາພີ ພຣະເຈົ້າມັກຈະເຮັດໃຫ້ເກີດການກັນດານອາຫານ
  ເພື່ອເປັນການລົງໂທດຊົນຊາດທັ້ງຫລາຍເມື່ອພວກເຂົາເຮັດບາບຕໍ່ຕ້ານພຣະອົງ.
- ໃນພຣະທັມອາໂມດ 8:11 ຄໍາວ່າ, "ການກັນດານອາຫານ"
  ຖືກໃຊ້ໃນລັກສະນະການປຽບທຽບທີ່ເວົ້າເຖິງເວລາທີ່ພຣະເຈົ້າລົງໂທດປະຊາກອນຂອງພຣະອົງໂດຍການບໍ່ເວົ້າກັບພວກເຂົາ
  ໃນຈຸດນີ້ສາມາດແປໄດ້ດ້ວຍຄໍາວ່າ "ການກັນດານອາຫານ" ໃນພາສາຂອງທ່ານ ຫລືໃນຄໍ່ອຍຄໍາທີ່ວ່າ "ຂັດສົນຫລາຍ" ຫລື
  "ການກີດກັນຢ່າງຮຸນແຮງ."

## ການກົ້ມຫົວ,ການກົ້ມກາຍ

### ນິຍາມ

ການກົ້ມຫົວ ໝາຍເຖິງການກົ້ມຫົວລົງເພື່ອສະແດງຄວາມນັບຖືແລະກຽດຕິຍົດຕໍ່ຜູ້ໃດຜູ້ໜຶ່ງ. “ ກົ້ມຂາບ”
ໝາຍເຖິງການກົ້ມຂາບຫລືລຸດເຂົ່າລົງຕໍ່າຫລາຍ, ມັກຈະມີໜ້າ ແລະມືລົງສູ່ພື້ນດິນ

- .ຄໍາເວົ້າອື່ນໆລວມມີ "ກົ້ມລຸດເຂົ່າ"(ໝາຍເຖິງລຸດເຂົ່າ) ແລະ
  "ກົ້ມຫົວ" (ໝາຍຄວາມວ່າຈະກົ້ມຫົວໄປທາງໜ້າດ້ວຍຄວາມເຄົາລົບທີ່ຖ່ອມຕົວຫລືດ້ວຍຄວາມໂສກເສົ້າ).
- ການກົ້ມຫົວລົງກໍອາດຈະເປັນສັນຍານຂອງຄວາມທຸກຫລືຄວາມທຸກໂສກ. ດົນທີ“ ກົ້ມຂາບ” ໄດ້ຖືກນໍາມາສູ່ສະພາບທີ່ຕໍ່າຕ້ອຍ.
- ປົກກະຕິແລ້ວຄົນເຮົາຈະກົ້ມຂາບຕໍ່ໜ້າຜູ້ທີ່ມີຖານະສູງກວ່າຫລືມີຄວາມສໍາຄັນໃຫຍ່ກວ່າເຊັ່ນກະສັດແລະຜູ້ປົກຄອງອື່ນໆ.
- ການລຸດເຂົ່າລົງຕໍ່ໜ້າພຣະເຈົ້າເປັນການສະແດງຄວາມເຄົາ ລົບຕໍ່ພຣະອົງ.
- ໃນພຣະຄໍາພີ ຜູ້ຄົນໄດ້ກົ້ມຫົວລົງທີ ພຣະເຢຊູ ເມື່ອພວກເຂົາຮູ້ເຫັນການອັດສະຈັນ ແລະ ການສອນທີ່ວ່າເພິ່ນມາຈາກ ພຣະເຈົ້າ.
- ພຣະຄໍາພີ ກ່າວວ່າໃນມື້ໜຶ່ງທີ່ພຣະເຢຊູກັບມາທຸກຄົນຈະລຸດເຂົ່າລົງນະມັດສະການພຣະອົງ.

### ຄໍາແນະນໍາໃນການແປ

- ອີງຕາມສະພາບການ, ຄໍາສັບນີ້ສາມາດຖືກແປດ້ວຍຄໍາ ຫລືປະໂຫຍກທີ່ມີຄວາມໝາຍວ່າ "ໂຄ້ງໄປຂ້າງໜ້າ" ຫລື "ງໍຫົວ" ຫລື
  "ລຸດເຂົ່າ."
- ຄໍາວ່າ "ກົ້ມຂາບ" ອາດຈະແປວ່າ "ລຸດເຂົ່າລົງ" ຫລື "ກົ້ມຫົວລົງ."


generated on Thu Jul 10 08:45:04 2025

- ບາງພາສາຈະມີຫລາຍກວ່າໜຶ່ງວິທີໃນການແປ ຄຳສັບນີ, ຂຶ້ນກັບສະພາບການ.

## ການຄວບຄຸມຕົນເອງ

### ນິຍາມ

ການຄວບຄຸມຕົນເອງແມ່ນຄວາມສາມາດໃນການຄວບຄຸມພຶດຕິກຳ ຂອງຕົນເອງເພື່ອຫລີກລ້ຽງການເຮັດບາບ.

- ມັນໝາຍເຖິງການປະພຶດທີດີ,ນັ້ນແມ່ນ, ຫລີກລ້ຽງຄວາມຄິດ,ການເວົ້າແລະການກະທຳທີຜິດ.
- ການຄວບຄຸມຕົນເອງແມ່ນໝາກຜົນຫລືລັກສະນະທີພຣະວິນຍານບໍລິສຸດປະທານໃຫ້ກັບຄຣິສຕຽນ.
- ບຸກຄົນທີກຳລັງຄວບຄຸມຕົນເອງແມ່ນສາມາດຢຸດຕົນເອງຈາກການເຮັດສິ່ງທີຜິດເຊິ່ງເຂົາອາດຈະຢາກເຮັດ.
  ພຣະເຈົ້າແມ່ນຜູ້ທີເຮັດໃຫ້ບຸກຄົນນັ້ນສາມາດຄວບຄຸມຕົນເອງໄດ້.

## ການຄືນດີ, ການໄຖ່, ຄືນດີ, ໄຖ່

### ນິຍາມ

ຄຳວ່າ " ຄືນດີ " ແລະ " ການຄືນດີ "
ໄດ້ເວົ້າເຖິງການທີພຣະເຈົ້າໄດ້ຈັດຕຽມເຄື່ອງບູຊາທີຈະໄຖ່ຄວາມບາບຂອງປະຊາຊົນແລະລະງັບພຣະພິໂຣດຂອງພຣະອົງຕໍ່ຄວາມບາບ.

- ໃນສະໄໝພັນທະສັນຍາເດີມ ພຣະເຈົ້າຊົ່ງອະນຸຍາດໃຫ້ມີການໄຖ່ຊົ່ວຄາວສຳລັບຄວາມບາບຂອງຄົນອິສະຣາເອນ
  ດ້ວຍການຖວາຍເຄື່ອງບູຊາດ້ວຍເລືອດຊຶ່ງກ່ຽວຂ້ອງກັບການຂ້າສັດ.
- ຕາມທີໄດ້ບັນທຶກໃນພັນທະສັນຍາໃໝ່
  ການສິ້ນພຣະຊົນຂອງພຣະຄຣິດເທິງໄມ້ກາງແຂນເປັນການໄຖ່ບາບທີແທ້ຈິງແລະຖາວອນຜ່ຽງຢ່າງດ່ຽວເທົ່ານັ້ນ.
- ເມືອພຣະເຢຊູສິ້ນພຣະຊົນ, ພຣະອົງໄດ້ຮັບການລົງໂທດທີມະນຸດຄວນໄດ້ຮັບ,ເພາະຮັບຄວາມບາບຂອງພວກເຂົາໄວ້ແທນ.
  ພຣະອົງໄດ້ຈ່າຍຄ່າລຶບລ້າງບາບດ້ວຍການສິ້ນພຣະຊົນຂອງພຣະອົງ.

### ຂໍ້ແນະນຳໃນການແປ

- ຄຳວ່າ " ໄຖ່ " ໄດ້ຖືກແປດ້ວຍຄຳ ຫລືຖ້ອຍຄຳທີມີຄວາມໝາຍວ່າ " ຈ່າຍໃຫ້ " ຫລື " ຈ່າຍແທນ " ຫລື "
  ທຳໃຫ້ບາບຂອງບາງຄົນໄດ້ຮັບການອະພັຍ " ຫລື " ຈ່າຍຊົດໃຊ້ຄ່າເສຍຫາຍສຳຫລັບອາຊະຍາກຳ. "
- ໃນວິທີອືນໆທີໄດ້ແປຄຳວ່າ " ການໄຖ່ " ອາດລວມເຖິງຄຳວ່າ " ການຈ່າຍ "ຫລື" ເຄື່ອງບູຊາທີຊົດໃຊ້ມາ " ຫລື "
  ເຮັດໃຫ້ມີການອະພັຍໂທດ. "
- ໃຫ້ໝັ້ນໃຈວ່າການແປຄຳນີບໍ່ໄດ້ໝາຍເຖິງ ການຈ່າຍເງິນ.

## ການຈູບ

### ນິຍາມ

ການຈູບຄືການກະທຳຊຶ່ງປາກຂອງບຸກຄົນນຶ່ງກວມປາກກັບອີກຄົນນຶ່ງຫຼືທີໜ້າ ຄຳນີສາມາດໃຊ້ໃນຮູບແບບຄຳອຸປະມາດ້ວຍ.

- ໃນບາງວັດທະນະທຳການຈູບກັນບົນແກ້ມເພື່ອເປັນການທັກທາຍຫຼືກ່າວອຳລາ.
- ການຈູບສາມາດສືສານເຖິງຄວາມຮັກໄດ້ຢ່າງເລິກເຊິ່ງລະຫວ່າງຄົນສອງຄົນເຊັ່ນ ລະຫວ່າງສາມີກັບພັນລະຍາ.
- ຄຳກ່າວ "ຈູບອຳລາບາງຄົນ" ໝາຍຄວາມວ່າກ່າວອຳລາດ້ວຍການຈູບ.
- ບາງຄັ້ງຄຳວ່າ "ຈູບ" ຖືກໃຊ້ໃນຄວາມໝາຍວ່າ "ກ່າວອຳລາຕໍ" ເມືອເອລີຊາໄດ້ກ່າວກັນກັບເອລີຢາ
  "ໃຫ້ຂ້າພຣະເຈົ້າໄປແລະຈູບບິດາແລະມານດາຂອງຂ້າພຣະເຈົ້າກ່ອນ"
  ເຂົາໄດ້ຕ້ອງການທີຈະກ່າວອຳລາກັບບິດາມານດາຂອງເຂົາກ່ອນຈາກພວກເຂົາເພື່ອຕິດຕາມເອລີຢາ.


generated on Thu Jul 10 08:45:04 2025

## ການຈົດທະບຽນສຳມະໂນຄົວ

### ນິຍາມ

ຄຳວ່າ"ການຈົດທະບຽນສຳມະໂນຄົວ"ແມ່ນການນັບຈຳນວນປະຊາຊົນຢ່າງເປັນທາງການໃນປະເທດນັ້ນໆ

- ພັນທະສັນຍາເດີມບັນທຶກໃນເວລາທີ່ແຕກຕ່າງກັນ ເມື່ອພຣະເຈົ້າໄດ້ຊົງບັນຊາໃຫ້ນັບຈຳນວນຜູ້ຊາຍອິດສະຣາເອນ
  ເທື່ອທຳອິດຕອນທີ່ຄົນອິດສະຣາເອນອອກຈາກເອຢິບ ແລະອີກເທື່ອຫນຶ່ງກ່ອນທີ່ພວກເຂົາຈະເຂົ້າໄປໃນແຜ່ນດິນການາອານ
- ຈຸດປະສົງຂອງການຈົດທະບຽນສຳມະໂນຄົວເຮັດເພື່ອຈະຮູ້ວ່າຈຳນວນຂອງປະຊາຊົນນັ້ນມີຈຳນວນເທົ່າໃດທີ່ຄວນຈະຈ່າຍພາສີ
- ຕົວຢ່າງ ມີເທື່ອຫນຶ່ງໃນພຣະຄຳພີບໍ່ພະຍົບ
  ທີ່ການນັບພວກຜູ້ຊາຍອິດສະຣາເອນເພື່ອໃຫ້ແຕ່ລະຄົນຈ່າຍເງິນເຄິ່ງເຊເຂວສຳຫລັບການເບິ່ງແຍງພຣະວິຫານ
- ເມື່ອຕອນພຣະເຢຊູນັ້ນຫນ້ອຍ
  ລັດຖະບານໂຣມັນໄດ້ເຮັດການຈົດທະບຽນສຳມະໂນຄົວປະຊາຊົນທຸກຄົນທີ່ອາໄສຢູ່ທົ່ວຈັກກະພັດ
  ເພື່ອຮຽກຮ້ອງໃຫ້ພວກເຂົາໃຫ້ຈ່າຍພາສີ

%ຄຳແນະນຳໃນການແປ

- ວິທີການເປັນໄປໄດ້ໃນການແປຄຳນີ້ສາມາດລວມທັ້ງ"ການນັບຊື"ຫລື"ຈົດລາຍຊື"ຫລື"ລົງທະບຽນ"
- ຄຳວ່າ"ຈົດທະບຽນສຳມະໂນຄົວ"ສາມາດແປໄດ້ວ່າ"ຈົດທະບຽນຫລືປະຊາຊົນ"ຫລື"ລົງທະບຽນປະຊາຊົນ"ຫລື"ຂຽນຊື່ປະຊາຊົນ

## ການດູຖູກຜູ້ອື່ນ, ໝ້າດູຖູກຢຽບຫຍາມ

### ນິຍາມ

ຄຳວ່າ "ການດູໝິ່ນ" ກ່າວເຖິງ ການດູໝິ່ນຢ່າງແຮງແລະຄວາມອັບປາຍົດທີ່ຢູ່ເລິກຊຶ່ງສະແດງຕໍ່ບາງສິ່ງຫຼືບາງຄົນ. ສິ່ງທີ່ໝ້າອັບອາຍຫຼາຍ
ເອີ້ນວ່າ "ໝ້າດູຖູກຢຽບຫຍາມ."

- ບຸກຄົນຫຼືພຶດຕິກຳທີ່ສະແດງຄວາມບໍ່ເຄົາລົບຕໍ່ພຣະເຈົ້າຈະເອີ້ນວ່າ " ໝ້າດູຖູກຢຽບຫຍາມ" ແລະອາດແປວ່າ
  "ບໍ່ເປັ້ນໜ້າເຄົາລົບນັບຖື." ຫຼື "ເສຍຊື່ສຽງໄປໝົດ" ຫຼື "ສົມຄວນຖືກດູຖູກ."
- ການ"ດູຖູກດູໝິ່ນ" ໝາຍເຖິງການຖືວ່າຄົນອື່ນມີຄ່ານ້ອຍກວ່າຫຼືຕ້ຳຕ້ອຍກວ່າຄົນອື່ນວ່າ ມີຄ່ານ້ອຍກວ່າຕົນເອງ.
- ຄຳເວົ້າຕໍ່ໄປນີ້ມີຄວາມໝາຍທີ່ຄ້າຍຄືກັນ: "ດູຖູກ" ຫຼື "ສະແດງການດູໝິ່ນ" ຫຼື "ປະຕິບັດດ້ວຍການດູໝິ່ນ." ທັ້ງ

ໝົດນີ້ໝາຍເຖິງ "ດູໝິ່ນຢ່າງຫຼວງຫຼາຍ" ຫຼື "ເຮັດໃຫ້ເສຍຊື່ສຽງ" ບາງຢ່າງຫຼືບາງຄົນດ້ວຍສິ່ງທີ່ເວົ້າແລະເຮັດ.

- ເມື່ອກະສັດດາວິດທຳບາບດ້ວຍການລ່ວງປະເວນີແລະການຄາດຕະກຳ ພຣະເຈົ້າກ່າວວ່າດາວິດໄດ້ "ດູໝິ່ນພຣະເຈົ້າ"
  ໝາຍຄວາມວ່າເຂົາໄດ້ດູໝິ່ນແລະບໍ່ສັດຊື່ຕໍ່ພຣະເຈົ້າຢ່າງຫຼວງຫຼາຍໂດຍການກະທຳຢ່າງນັ້ນ.

## ການດູໝິ່ນ

### ນິຍາມ

ການດູໝິ່ນບາງສິ່ງບາງຢ່າງໝາຍເຖິງກະທຳໃນທາງທີ່ເຮັດໃຫ້ມົວໝອງຫລືມີມົນທິນ ເຮັດໃຫ້ເສຍຫາຍ ຫລື
ບໍ່ໃຫ້ເຄົາລົບບາງສິ່ງບາງຢ່າງທີ່ບໍຣິສຸດສັກສິດ

- ຄົນທີ່ໄດ້ຮັບການດູໝິ່ນຄືຄົນທີ່ກະທຳຕົວໃນທາງທີ່ຂາດສິນລະທຳແລະບໍ່ຖວາຍພຣະກຽດແດ່ພະເຈົ້າ
- ຄຳກິຣິຍາວ່າ "ດູໝິ່ນ" ສາມາດແປໄດ້ວ່າ "ການກະທຳຢ່າງບໍ່ມີສິນລະທຳ" ຫລື "ເປັ້ນການບໍ່ເຄົາລົບຕໍ່" ຫລື "ບໍ່ໃຫ້ກຽດແກ່"
- ພຣະເຈົ້າໄດ້ຕັດກັບຊາວອິສຣາເອລວ່າພວກທ່ານ "ດູໝິ່ນ" ຕົວພວກເຂົາເອງດ້ວຍຮູບເຄົາລົບ
  ນັ້ນໝາຍເຖິງວ່າປະຊາຊົນເຮັດຕົວພວກເຂົາໃຫ້ "ບໍ່ສະອາດ" ຫລື "ບໍ່ມີກຽດ" ໂດຍຄວາມບາບນີ
  ພວກເຂົາບໍ່ໄດ້ຖວາຍພະກຽດແດ່ພະເຈົ້າດ້ວຍເຊັ່ນກັນ

ຂຶ້ນຢູ່ກັບເນື້ອເຮື່ອງ ຄຳເວົ້າຄຳວ່າ "ດູໝິ່ນ" ສາມາດແປໄດ້ວ່າ "ບໍ່ໃຫ້ກຽດ" ຫລື "ຂາດສິນລະທຳ" ຫລື "ບໍ່ບໍລິສຸດ"

## ການຖວາຍ

### ນິຍາມ

ຄຳວ່າ "ຖວາຍເຄື່ອງສັນຕິບູຊາ" ຄືໜຶ່ງໃນການຖວາຍເຄື່ອງບູຊາທີ່ພຣະເຈົ້າຊົງບັນຊາໃຫ້ຊາວອິດສະລາເອນຖວາຍ. ບາງເທື່ອຖືກເອີ້ນວ່າ "ການຖວາຍຂອບພຣະຄຸນ" ຫຼື "ສ້າພັນທະພາບບູຊາ."

- ການຖວາຍເຄື່ອງບູຊານັ້ນມີການຖວາຍບູຊາສັດທີ່ປາສະຈາກຕຳໜິແດ່ພຣະເຈົ້າ, ການຜົມເລືອດທີ່ແທ່ນບູຊາ ແລະການເຜົາໄຂມັນແລະສ່ວນອື່ນໆໂດຍເຜົາແຍກຕ່າງຫາກ.
- ນອກຈາກນີ້ຍັງມີການຖວາຍເຂົ້າໜົມປັ້ງບໍ່ມີເຊື້ອແປ້ງຟູ,ເຜົ້າວາງເທິງແທ່ນບູຊາ.
- ປະໂລຫິດແລະຜູ້ທີ່ຖວາຍເຄື່ອງບູຊາໄດ້ຮັບອະນຸຍາດໃຫ້ຮັບປະທານສ່ວນແບ່ງອາຫານທີ່ເປັນເຄື່ອງເຜົ້າບູຊາ.
- ການຖວາຍເຄື່ອງບູຊາເປັນສັນຍາລັກເຖິງສາມັກຄີທຳລະຫວ່າງພຣະເຈົ້າແລະປະຊາກອນຂອງພຣະອົງ.

## ການຖວາຍຕາມຄວາມສະໝັກໃຈ

### ນິຍາມ

ການຖວາຍດ້ວຍຄວາມສະໝັກໃຈຄືຊະນິດເຄື່ອງຖວາຍບູຊາທີ່ຖວາຍແກ່ພຣະເຈົ້າທີ່ບໍ່ຖືກກຳນົດໄວ້ໂດຍບັນຍັດຂອງໂມເຊ.ມັນເປັນທາງເລືອກຂອງບຸກຄົນທີ່ຖວາຍ

- ຖ້າເຄື່ອງຖວາຍຕາມຄວາມສະໝັກໃຈເປັນສັດທີ່ເອົ້າມາຖວາຍ ສັດ ໄດ້ຮັບອະນຸຍາດໃຫ້ມີຕຳນິໄດ້ແມ່,ເນື່ອງຈາກວ່າເປັນການຖວາຍຕາມຄວາມສະໝັກໃຈ.
- ຄົນອິສະຣາເອນໄດ້ກິນສັດທີ່ນຳມາຖວາຍບູຊາ ຖືວ່າເປັນສ່ວນນຶ່ງຂອງງານລ້ຽງສະຫຼອງ.
- ເມື່ອເຄື່ອງຖວາຍຕາມຄວາມສະໝັກໃຈ ສາມາດແຈກຈ່າຍໄດ້ ນີ້ເປັນເຫດໃຫ້ເກີດຄວາມຍິນດີໃນອິສະຣາເອນ,ເນື່ອງຈາກໄດ້ສະແດງວ່າການເກັບກ່ຽວໄດ້ຜົນດີ,ດັ່ງນັ້ນປະຊາຊົນກໍມີອາຫານຢ່າງຫຼວງຫຼາຍ.
- ພຣະທັມເອຊະຣາໄດ້ອະທິບາຍເຖິງປະເພດຕ່າງໆຂອງເຄື່ອງຖວາຍຕາມຄວາມສະໝັກໃຈທີ່ຖືກນຳມາຖວາຍເພື່ອທຳການບຸຣະນະພຣະວິຫານ,ການຖວາ ທີ່ທຳດ້ວຍທອງຄຳແລະເງິນ.

## ການຖວາຍທັນຍະບູຊາ

### ນິຍາມ

ການຖວາຍທັນຍະບູຊາຄືຂອງຂວັນທີ່ເປັນເຂົ້າສາລີຫລືແປ້ງທັນຍະພືດທີ່ຖວາຍແດ່ພຣະເຈົ້າ. ຫລາຍຄັ້ງຄືຫລັງຈາກການເຜົາເຄື່ອງເຜົ້າບູຊາ.

- ທັນຍະພືດທີ່ໃຊ້ສຳລັບການຖວາຍທັນຍະບູຊາຈະຖືກບົດຈົນເປັນຜົງມາຢ່າງລະອຽດ.ແລະບາງຄັ້ງກໍຖືກປຸງສຸກກ່ອນທີ່ຈະນຳມາຖວາຍ, ແຕ່ເວລາອື່ນໆກໍຕອ້ງປ່ອຍໄວ້ແບບບໍ່ຕ້ອງປຸງ.
- ນ້ຳມັນແລະເກືອຈະຖືກເທລົງໄປໃນແປ້ງທັນຍະພືດ, ແຕ່ບໍ່ອະນຸຍາດໃຫ້ໃສ່ເຊື້ອເຂົ້າໜົມປັ້ງຫລືນ້ຳເຜິ້ງ.
- ສ່ວນຂອງການຖວາຍທັນຍະບູຊາຈະຖືກເຜົາແລະບາງສ່ວນຈະໃຫ້ພວກປະໂລຫິດໄວ້ກິນ.

## ການຖວາຍບູຊາຄວາມຜິດ

### ນິຍາມ

ການຖວາຍບູຊາຄວາມຜິດຄືການຖວາຍຫຼື
ຖວາຍບູຊາທີ່ພຣະເຈົ້າຊົງໄດ້ກຳນົດໃຫ້ຊາວອິສະຣາເອນທຳຂຶ້ນ.ຖ້າພວກເຂົາໄດ້ທຳບາງສິ່ງຜິດໂດຍບໍ່ໄດ້ເຈດຕະນາ ຢ່າງເຊັ່ນບໍ່ເຄົາລົບພຣະເຈົ້າຫຼືການທຳລາຍຊັບສິນຂອງບຸກຄົນອື່ນ.

- ການຖວາຍນີ້ກ່ຽວຂ້ອງກັບການຖວາຍບູຊາສັດ,ຈ່າຍຄ່າປັບດວ້ຍເງິນຫລືທອງ.
- ນອກຈາກນີ້,ບຸກຄົນທີ່ຜິດພາດຍັງຕ້ອງຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນ.


generated on Thu Jul 10 08:45:04 2025

## ການຖະຫວາຍບູຊາ ເຄື່ອງຖະຫວາຍບູຊາ

### ນິຍາມ

ໃນພຣະຄຳພີຄຳວ່າ "ການຖະຫວາຍບູຊາ" ແລະ "ເຄື່ອງຖະຫວາຍບູຊາ"
ອ້າງເຖິງຂອງຂວັນພິເສດທີ່ຖວາຍໃຫ້ກັບພຣະເຈົ້າຊຶ່ງເປັນການນະມັດສະການພຣະອົງ ປະຊາຊົນຖວາຍເຄື່ອງບູຊາແດ່ພະຫງົມດ້ວຍ

- ໂດຍທົ່ວໄປ ຄຳວ່າ "ເຄື່ອງຖະຫວາຍບູຊາ" ໝາຍເຖິງສິ່ງຂອງອັນໃດກໍຕາມທີ່ໄດ້ຖະຫວາຍຫຼືໄດ້ມອບໃຫ້ ຄຳວ່າ
  "ການຖະຫວາຍບູຊາ" ອ້າງເຖິງຂອງບາງສິ່ງທີ່ໄດ້ມອບໃຫ້ຫຼືໄດ້ກະທຳໂດຍຜູ້ໃຫ້.
- ເຄື່ອງຖະຫວາຍບູຊາແດ່ພຣະເຈົ້າເປັນສິ່ງຂອງສະເພາະທີ່ພຣະເຈົ້າຊົງບັນຊາໃຫ້ຊົນຊາດອິດສະຣາເອນຖະຫວາຍແດ່ພຣະອົງເພື່ອສະແດງຄວາມຈົງຮັກ
- ຊື່ຂອງເຄື່ອງຖະຫວາຍບູຊາຕ່າງໆເຊັ່ນ "ເຄື່ອງເຜົາບູຊາ" ແລະ "ແທນບູຊາ"
  ຊີ້ໃຫ້ເຮົາເຫັນວ່າເຄື່ອງຖະຫວາຍບູຊາປະເພດໃດທີ່ກຳລັງຖືກນຳມາຖະຫວາຍບູຊາຢູ່.
- ເຄື່ອງບູຊາຖະຫວາຍແດ່ພຣະເຈົ້າສ່ວນຫຼາຍແມ່ນກ່ຽວຂ້ອງກັບການຂ້າສັດ
- ມີພຽງແຕ່ການຖວາຍບູຊາຂອງພຣະເຢຊູທີ່ສົມບູນເພາະພຣະອົງເປັນພຣະບຸດຂອງພຣະເຈົ້າຜູ້ທີ່ບໍ່ມີຄວາມບາບແລະສາມາດຊຳລະລ້າງຄົນທັ້ງຫຼາຍຈາກ
  ການບູຊາສັດບໍ່ສາມາດເຮັດຢ່າງນັ້ນໄດ້
- ມີຄຳກ່າວທີ່ປຽບທຽບວ່າ "ຖະຫວາຍຕົວຂອງທ່ານໃຫ້ເປັນເຄື່ອງບູຊາທີ່ມີຊີວິດ" ໝາຍຄວາມວ່າ
  ໃຫ້ມີຊີວິດໃນການເຊື່ອຟັງພຣະເຈົ້າຢ່າງສົມບູນແບບ ຍອມມອບທຸກຢ່າງເພື່ອຮັບໃຊ້ພຣະອົງ.

%ຄຳແນະນຳໃນການແປ

- ຄຳວ່າ "ເຄື່ອງຖະຫວາຍບູຊາ" ສາມາດແປວ່າ "ຂອງຖະຫວາຍແດ່ພຣະເຈົ້າ" ຫຼື "ບາງສິ່ງທີ່ໄດ້ມອບໃຫ້ແກ່ພຣະເຈົ້າຫຼື"
  ບາງສິ່ງທີ່ມີຄ່າທີ່ນຳມາສະເໜີແດ່ພຣະເຈົ້າ
- ຂຶ້ນຢູ່ກັບກໍລະນີນັ້ນໆ ຄຳວ່າ "ການຖະຫວາຍບູຊາ" ສາມາດແປວ່າ "ບາງສິ່ງທີ່ມີຄ່າທີ່ຖະຫວາຍໃນການນະມັດສະການ" ຫຼື
  "ຫຼືສັດພິເສດທີ່ຖືກຂ້າເພື່ອຖວາຍແດ່ພຣະເຈົ້າ".
- ການກະທຳ "ການຖະຫວາຍບູຊາ" ສາມາດແປໄດ້ອີກວ່າ" ມອບຖະຫວາຍບາງສິ່ງທີ່ມີຄ່າ" ຫຼື "ຂ້າສັດແລະຖະຫວາຍແດ່ພຣະເຈົ້າ"
- ວິທີອື່ນທີ່ແປ "ມອບຖະຫວາຍຕົວທ່ານເອງເປັນເຄື່ອງຖະຫວາຍບູຊາທີ່ມີຊີວິດ" ສາມາດແປວ່າ
  "ຕະຫລອດທີ່ມີຊີວິດຢູ່ຈົ່ງຖະຫວາຍຕົວທ່ານເອງຕໍ່ພຣະເຈົ້າຢ່າງໝົດສິ້ນເຊັ່ນດຽວກັບສັດທີ່ຖືກຖະຫວາຍເທິງແທນບູຊາ".

## ການທຳນວາຍໂຊກຊາຕາ, ຜູ້ທຳນວາຍໂຊກຊາຕາ,ການທຳນວາຍ,ໝໍດູ

### ນິຍາມ

ຄຳວ່າ "ການທຳນວາຍໂຊກຊາຕາ" ແລະ "ການທຳນວາຍ"
ກ່າວເຖິງການພະຍາຍາມຫາຂ້ໍມູນຈາກວິນຍານໃນໂລກເໜືອທຳມະຊາດ.ຄົນທີ່ທຳແບບນີ້ບາງຄັ້ງເອີ້ນວ່າ" ຜູ້ພະຍາກອນ" ຫຼື "ຜູ້ທຳນວາຍ".

- ໃນສະໄໝພັນທະສັນຍາເດີມ,ພຣະເຈົ້າຊົງໄດ້ບັນຊາຫ້າມຄົນອິດສະຣາເອນທຳການທຳນວາຍ ຫຼືພະຍາກອນ.
- ພຣະເຈົ້າຊົງອະນຸຍາດໃຫ້ປະຊາຊົນຂອງພຣະອົງສະແຫວງຫາຂ້ໍມູນຈາກພຣະອົງໂດຍໃຊ້ຢູຣິມແລະທຳມິມ,ຊຶ່ງເປັນຫີນທີ່ພຣະອົງຊົງກຳນົດໄວ້ໃຫ້ມະຫາ
- ຜູ້ທຳນວາຍນອກສາດສະໜາໃຊ້ບັນດາວິທີການທີ່ແຕກຕ່າງທີ່ພະຍາຍາມຫາຂ້ໍມູນຈາກໂລກຝ່າຍວິນຍານ.ບາງຄັ້ງພວກເຂົາຈະກວດສອບຈາກພາຍໃນຊາ
- ໃນພັນທະສັນຍາໃໝ່,ພຣະເຢຊູ
  ແລະພວກອັຄະທູດໄດ້ປະຕິເສດການທຳນວາຍໂຊກຊາຕາ,ການທຳນວາຍ,ແມ່ມົດ,ແລະເວດມົນ.ການກະທຳທັ້ງຫຼາຍທີ່ກ່ຽວກັບການໃຊ້ພະລັງແຫ່ງວິນຍ
  ແລະເຫຼົ່ານີ້ພຣະເຈົ້າຊົງປະນາມ.

## ການທົດລອງ

### ນິຍາມ

ຄຳວ່າ "ການທົດລອງ" ອ້າງເຖິງສະຖານນະການທີ່ບາງຢ່າງຫລືບາງຄົນຖືກ"ທົດລອງ" ຫລືທົດສອບ.

- ການທົດລອງສາມາດເປັນການພິຈາລະນາຄະດີໃນສານເຊິ່ງມີການສືບຫລັກຖານໃຫ້ພິສູດວ່າບຸກຄົນປົດຈາກຄວາມຜິດຫລືກະທຳຄວາມຜິດ.
- ຄຳວ່າ "ການທົດລອງ"
  ຍັງອ້າງເຖິງສະຖານນະການທີ່ຍາກລຳບາກທີ່ບຸກຄົນຈະຜ່ານໄປເຊັ່ນດຽວກັບທີ່ພຣະເຈົ້າທົດສອບຄວາມເຊື່ອຂອງພວກເຂົາ. ຄຳອື່ນໆ
  ສຳລັບເລື່ອງນີ້ຄື "ການທົດສອບ" ຫລື "ການທົດລອງ."
- ຫລາຍຄົນໃນພຣະຄຳພີໄດ້ຮັບການທົດສອບເພື່ອເບິ່ງວ່າພວກເຂົາຍັງຄົງເຊື່ອແລະເຊື່ອຟັງພຣະເຈົ້າຕໍ່ໄປຫລືບໍ່.
  ພວກເຂົາຕ້ອງຜ່ານການທົດລອງເຊິ່ງລວມເຖິງການຖືກຄັ້ງນຕີ, ການຖືກຈຳຄຸກ, ຫລືແມ່ນຖືກຂ້າຕາຍເພາະຄວາມເຊື່ອຂອງພວກເຂົາ.

## ການທົດສອບ

### ນິຍາມ

ຄຳວ່າ "ການທົດສອບ" ອ້າງເຖິງປະສົບການທີ່ຍາກລຳບາກຫຼືເຈັບປວດເຊິ່ງສະແດງໃຫ້ເຫັນເຖິງຈຸດແຂງແລະຈຸອ່ອນຂອງບຸກຄົນ

- ພຣະເຈົ້າທົດສອບຄົນ, ແຕ່ພຣະອົງບໍ່ໄດ້ລໍ້ລວງພວກເຂົາ. ແນວໃດກໍຕາມຊາຕານຊັກຊວນຜູ້ຄົນໃຫ້ເຮັດບາບ.
- ບາງຄັ້ງພຣະເຈົ້າໃຊ້ການທົດສອບເພື່ອເປີດເຜີຍຄວາມຜິດຂອງຄົນ.
  ການທົດສອບຊ່ວຍໃຫ້ບຸກຄົນຫັນໜີຈາກຄວາມບາບແລະໃກ້ຊິດກັບພະເຈົ້າ.
- ຄຳແລະໂລຫະອື່ນໆຖືກທົດສອບດ້ວຍໄຟເພື່ອຮູ້ວ່າມັນມີຄວາມບໍລິສຸດແລະແຂງແຮງຕີປານໃດ.
  ນີ້ແມ່ນພາບທີ່ພຣະເຈົ້າໃຊ້ສະພາບການທີ່ເຈັບປວດເພື່ອທົດສອບປະຊາຊົນຂອງພຣະອົງ.
- ເພື່ອ "ທົດສອບ" ສາມາດໝາຍວ່າ, "ທ້າທາຍບາງຢ່າງຫຼືບາງຄົນເພື່ອພິສູດຄຸນຄ່າຂອງມັນ."
- ໃນແງ່ຂອງການທົດລອງພຣະເຈົ້າ, ມັນໝາຍຄວາມວ່າຈະບໍ່ເຊື່ອຟັງພຣະອົງ, ໃຊ້ປະໂຫຍດຈາກຄວາມເມດຕາຂອງພຣະອົງ.
- ພຣະເຢຊູບອກຊາຕານວ່າການທົດລອງພຣະເຈົ້າບໍ່ຖືກຕ້ອງ. ພະອົງເປັນພຣະເຈົ້າຜູ້ມີລິດທານຸພາບສູງສຸດ,
  ບໍລິສຸດທີ່ສູງກວ່າທຸກສິ່ງທຸກຢ່າງແລະທຸກຄົນ.

### ຄຳແນະນຳໃນການແປ

- ຄຳວ່າ "ທົດສອບ"ສາມາດແປໄດ້ວ່າ "ທ້າທາຍ" ຫຼື "ເຮັດໃຫ້ເກີດປະສົບການທີ່ຍາກລຳບາກ"ຫຼື "ພິສູດ".
- ວິທີການແປ "ການທົດສອບ" ສາມາດເປັນ "ຄວາມທ້າທາຍ" ຫຼື "ປະສົບການທີ່ຫຍຸ້ງຍາກລຳບາກ".
- "ທຳການທົດສອບ" ສາມາດແປວ່າ "ທົດສອບ" ຫຼື "ການເຮັດໃຫ້ມີຄວາມທ້າທາຍ" ຫຼື "ບັງຄັບເພື່ອພິສູດຕົນເອງ".
- ໃນແງ່ຂອງການທົດລອງພຣະເຈົ້າ, ສິ່ງນີ້ສາມາດແປເປັນ "ພະຍາຍາມບັງຄັບໃຫ້ພຣະເຈົ້າພິສູດຄວາມຮັກຂອງພຣະອົງ."
- ໃນບາງສະພາບການ, ຄຳວ່າ "ທົດສອບ" ສາມາດໝາຍຄວາມວ່າ "ລໍ້ລວງ".

## ການນະມັດສະການ

### ນິຍາມ

"ການນະມັດສະການ" ໝາຍເຖິງການຍົກຍ້ອງສັນລະເສີນແລະເຊື່ອຟັງພຣະເຈົ້າຢ່າງຈິງໃຈ.

- ຄຳນີ້ບາງຄັ້ງຈະມີຄວາມໝາຍຕາມຕົວອັກສອນ "ນ້ອມຕົວລົງ" ຫລື "ຂາບໄຫວ້" ເພື່ອຖ່ອມຕົວແລະໃຫ້ກຽດບາງຄົນ.
- ພວກເຮົານະມັດສະການພຣະເຈົ້າເມື່ອເຮົາຮັບໃຊ້ແລະໃຫ້ກຽດພຣະອົງ ໂດຍການສັນລະເສີນພຣະອົງແລະເຊື່ອຟັງພຣະອົງ.
- ເມື່ອປະຊາຊົນອິດສະຣາເອນນະມັດສະການພຣະເຈົ້າ ມັກມີການຖະຫວາຍສັດເທິງແທ່ນບູຊາ.
- ບາງຄົນນະມັດສະການພະຫຼົມທັງຫຼາຍ.

### ຄຳນະນຳໃນການແປ:

- ຄຳທີ່ວ່າ "ນະມັດສະການ" ໝາຍເຖິງ "ກົ້ມລົງ" ຫຼື "ໃຫ້ກຽດແລະຮັບໃຊ້ພຣະເຈົ້າ" ຫຼື "ໃຫ້ກຽດແລະເຊື່ອຟັງ."
- ໃນບາງກໍລະນີ, ກໍສາມາດແປວ່າ "ການສັນລະເສີນຢ່າງຖ່ອມຕົວ" ຫລື "ໃຫ້ກຽດແລະສັນລະເສີນ."

## ການບັນເທົາ

### ນິຍາມ

ຄຳວ່າ "ການບັນເທົາ"
ອ້າງເຖິງເຄື່ອງບູຊາທີ່ເຮັດໃຫ້ມີຄຸນງາມຄວາມດີຫລືເຮັດໃຫ້ບັນລຸຄວາມຫ່ຽງຫ່ຳຂອງພະເຈົ້າແລະເພື່ອໃຫ້ການບັນເທົາພະພິໂຣດຂອງພະເຈົ້າຈະສະຫງົບລົງ

- ການຖວາຍເຄື່ອງບູຊາເລືອດຂອງພະເຢຊູຄຣິດເປັນການບັນເທົາແດ່ພະເຈົ້າສຳລັບຄວາມບາບຂອງມະນຸດຊາດ
- ການຕາຍຂອງພະເຢຊູຄຣິດເທິງໄມ້ກາງແຂນບັນເທົາພະພິໂຣດຂອງພະເຈົ້າຕໍ່ຄວາມບາບ
  ນີ້ເປັນການຈັດຕຽມທາງສຳລັບພະເຈົ້າຕໍ່ຄົນຂອງພະອົງດ້ວຍຄວາມພໍພຣະທັຍແລະຊົງປຣະທານຊີວິດນິຣັນດອນແກ່ພວກເຂົາ

### ຄຳແນະນຳໃນການແປ

- ຄຳນີ້ສາມາດແປໄດ້ເຊັ່ນ "ການບັນເທົາ" ຫລື "ເປັນເຫດໃຫ້ພະເຈົ້າຍົກໂທດຄວາມບາບແລະໃຫ້ຄວາມເມດຕາສົງສານປະຊາຊົນ"
- ຄຳວ່າ "ການໄຖ່ໂທດ" ເປັນຄວາມຫມາຍທີ່ໃກ້ຄຽງກັບ "ການບັນເທົາ" ເປັນສິ່ງສຳຄັນຫລາຍທີ່ປຽບທຽບວ່າສອງຄຳນີ້ໃຊ້ຢ່າງໃດ


generated on Thu Jul 10 08:45:04 2025

## ການບໍ່ວລະບັດ, ການຮັບໃຊ້

### ນິຍາມ

ຄໍາວ່າ“ ຮັບໃຊ້” ໝາຍຄວາມວ່າເຮັດສິ່ງຕ່າງໆເພື່ອຊ່ວຍຄົນອື່ນ. ມັນຍັງສາມາດໝາຍຄວາມວ່າ "ການນະມັດສະການ."

- ໃນສະພາບການຂອງແມ່ຍິງທີ່ຮັບໃຊ້ແຂກ, ຄໍາສັບນີ້ມີຄວາມໝາຍວ່າ "ເບິ່ງແຍງ" ຫຼື "ຮັບໃຊ້ເອົາອາຫານໃຫ້" ຫຼື "ຈັດຫາອາຫານ ສໍາລັບ."ເຖິງ.

"1% comment_5adb7a6af206fdb7787dd58f4b215940

- ຄໍາວ່າ“ ການບໍ່ວລະບັດ” ໝາຍເຖິງການກະທໍາຮັບໃຊ້. ມັນຍັງສາມາດຖືກນໍາໃຊ້ເພື່ອຫມາຍເຖິງ "ການປະຊຸມ" ຂອງຄຣິສຕຽນໃນຂະນະທີ່ພວກເຂົານະມັດສະການພຣະເຈົ້າຮ່ວມກັນ.
- ຄໍາວ່າ "ການຮັບໃຊ້" ຍັງສາມາດແປເປັນ, "ເບິ່ງແຍງເປັນພິເສດ" ຫຼື "ເຮັດວຽກເພື່ອ" ຫລື "ເບິ່ງແຍງ" ຫລື "ເຊື່ອຟັງ", ຂຶ້ນກັບສະພາບການ.
- "ການຮັບໃຊ້ພຣະເຈົ້າ" ສາມາດແປເປັນ "ການນະມັດສະການແລະເຊື່ອຟັງພຣະເຈົ້າ" ຫຼື "ເຮັດວຽກທີ່ພຣະເຈົ້າສັ່ງ."
- ເພື່ອ“ ການບໍ່ວລະບັດເທິງໂຕະ” ໝາຍເຖິງການເອົາອາຫານໄປໃຫ້ຄົນທີ່ກໍາລັງນັ່ງໂຕະ.
- ຜູ້ທີ່ສອນຄົນອື່ນກ່ຽວກັບພຣະເຈົ້າໄດ້ຖືກກ່າວວ່າໃຫ້ຮັບໃຊ້ທັ້ງພຣະເຈົ້າແລະຄົນອື່ນທີ່ພວກເຂົາສອນ.
- ອັກຄະສາວົກໂປໂລໄດ້ຂຽນເຖິງຄຣິດສຕຽນຊາວໂກຣິນໂທກ່ຽວກັບວິທີທີ່ພວກເຂົາໃຊ້ເພື່ອ“ ຮັບໃຊ້” ພັນທະສັນຍາພຣະຄໍາພີເດີມ. ນີ້ໝາຍເຖິງການເຊື່ອຟັງກົດຂອງໂມເຊ.
- ດຽວນີ້ພວກເຂົາ“ ຮັບໃຊ້” ພັນທະສັນຍາພຣະຄໍາພີໃໝ່, ນັ້ນແມ່ນ, ຍ້ອນການເສຍສະລະຂອງພຣະເຢຊູຢູ່ເທິງໄມ້ກາງແຂນ, ຜູ້ທີ່ເຊື່ອໃນພຣະເຢຊູໄດ້ຖືກປ່ຽນແປງໂດຍພຣະວິນຍານບໍລິສຸດເຮັດໃຫ້ພຣະເຈົ້າພໍໃຈແລະດໍາລົງຊີວິດທີ່ບໍລິສຸດ.
- ໂປໂລເວົ້າກ່ຽວກັບເລື່ອງນີ້ໃນແງ່ຂອງ "ການຮັບໃຊ້" ຂອງພວກເຂົາຕໍ່ສັນຍາເກົ່າຫລື ໃໝ່. ສິ່ງນີ້ສາມາດຖືກແປວ່າ "ການຮັບໃຊ້" ຫລື "ການເຊື່ອຟັງ" ຫລື "ການອຸທິດຕົນ."

## ການປິດລ້ອມ, ປິດລ້ອມ

### ນິຍາມ

ຄໍາວ່າປິດລ້ອມ "ການປິດລ້ອມ " ອ້າງເຖິງເມື່ອກອງທັບມາບຸກໂຈມຕີປິດລ້ອມເມືອງເຮັດໃຫ້ເມືອງນັ້ນຕ້ອງ ອຶດເຂົ້າ ອຶດນ້ໍາ ຂາດແຄນອາຫານ ການ. "ປິດລ້ອມ"ເມືອງ ໝາຍເຖິງການເຮັດໃຫ້ເມືອງນັ້ນຢູ່ພາຍໃຕ້ການປິດລ້ອມ.

- ເມືອບາບີໂລນມາໂຈມຕີຊາວອິດສະຣາເອນ, ພວກເຂົາກໍໃຊ້ກົນລະຍຸດໃນການປິດລ້ອມນະຄອນເຢຣູຊາເລັມເພື່ອເຮັດໃຫ້ຄົນທີ່ຢູ່ໃນເມືອງອ່ອນແຮງລົງ.
- ຫລາຍຄັ້ງໃນລະຫວ່າງທີ່ມີການປິດລ້ອມໂຈມຕີ, ທາງລາດດິນຈະຄ່ອຍໆຖືກສ້າງຂຶ້ນມາໃຫ້ເປັນຄັນຄູສູງເພື່ອໃຫ້ກອງທັບໂຈມຕີຂ້າມກໍາແພງເມືອງແລະສາມາດບຸກເມືອງໄດ້.
- ຄໍາກ່າວທີ່ບອກວ່າ "ວາງການປິດລ້ອມເມືອງ" ໝາຍເຖິງການທໍາການລ້ອມເມືອງ. ມີຄວາມໝາຍເໝືອນກັນກັບຄໍາວ່າ "ປິດລ້ອມ."
- ຄໍາວ່າ "ຖືກປິດລ້ອມ" ມີຄວາມໝາຍເໝືອນກັບຄໍາທີ່ບອກວ່າ "ພາຍໃຕ້ການປິດລ້ອມ." ຄໍາສອງຢ່າງນີ້ອະທິບາຍເຖິງເມືອງທີ່ກອງທັບສັດຕູກໍາລັງປິດລ້ອມຢູ່ແລະຖືກລ້ອມຢູ່.

## ການປົກຄອງ

### ນິຍາມ

ຄໍາວ່າ "ການປົກຄອງ" ກ່າວເຖິງອໍານາດການຄວບຄຸມ ຫລື ສິດທິອໍານາດ ເຫນືອມະນຸດ ສັດ ຫລື ແຜ່ນດິນໂລກ.

- ພຣະເຢຊູຄຣິສ ໄດ້ຮັບການກ່າວເຖິງວ່າ ມີອໍານາດເຫນືອທຸກສິ່ງ ເທິງແຜ່ນດິນໂລກ ເປັນຜູ້ທໍານວຍ ປະໂລຫິດ ແລະກະສັດ.
- ການປົກຄອງ ຂອງຊາຕານ ຜ່າຍແຜ່ຕະຫລອດການ ໂດຍການສືບພຣະຊົນຂອງພຣະເຢຊູຄຣິສ ເທິງໄມ້ກາງແຂນ.
- ໃນການຊົ່ງສ້າງ ພຣະເຈົ້າໄດ້ກ່າວວ່າ ມະນຸດໄດ້ອໍານາດຄອບຄອງ ເຫນືອປາ ນົກ ແລະສິ່ງທີ່ມີຊີວິດທັ້ງຫມົດ ເທິງແຜ່ນດິນໂລກ.

### ຄໍາແນະນໍາໃນການແປ

- ວິທີອື່ນໆ ໃນການແປຄໍານີ ອາດລວມເຖິງ "ສິດທິອໍານາດ"


generated on Thu Jul 10 08:45:04 2025

ຫລື "ພະລັງອຳນາດ" ຫລື "ການຄວບຄຸມ" ທັ້ງນີ້ຂຶ້ນຢູ່ກັບບໍລິບົດນັ້ນໆ.

- ຄຳເວົ້າວ່າ "ມອບອຳນາດເຫນືອ" ອາດແປວ່າ "ປົກຄອງເຫນືອ" ຫລື"ຈັດການ".

## ການຜິດຖຽງກັນ

### ນິຍາມ

ຄຳວ່າ“ ການຜິດຖຽງກັນ” ໝາຍເຖິງຄວາມຂັດແຍ່ງທາງດ້ານຮ່າງກາຍຫຼືຈິດໃຈລະຫວ່າງຄົນເຮົາ.

- ບຸກຄົນທີ່ກໍ່ໃຫ້ເກີດຄວາມວຸ້ນວາຍເຮັດສິ່ງຕ່າງໆທີ່ເຮັດໃຫ້ເກີດການຜິດຖຽງກັນແລະສ້າງຄວາມຮູ້ສຶກທີ່ບໍ່ດີຕໍ່ກັນແລະກັນ.
- ການຜິດຖຽງກັນບາງຄັ້ງກໍ່ສະແດງເຖິງອາລົມທີ່ຮຸນແຮງ ເຊັ່ນຄວາມໃຈຮ້າຍຫລືຄວາມຂົມຂື່ນ.
- ວິທີການອື່ນໃນການແປ ຄຳສັບນີ້ອາດປະກອບມີ, "ຄວາມບໍ່ເຫັນດີ" ຫລື "ການຜິດຖຽງ" ຫລື "ການຂັດແຍ້ງ".

## ການຢ່າ

### ນິຍາມ

ການຢ່າຄືການກະທຳຕາມກົດໝາຍໃນການຍຸຕິການສົມລົດ.ຄຳວ່າການຢ່າ
ໝາຍເຖິງການແຍກຄູ່ສົມລົດຢ່າງເປັນທາງການແລະຖືກຕ້ອງຕາມກົດໝາຍເພື່ອຍຸຕິການສົມລົດ.

- ຄວາມໝາຍຕາມຕົວອັກສອນຂອງຄຳວ່າ "ຢ່າ" ຄື "ສົ່ງອອກໄປ" ຫຼື "ແຍກອອກຈາກກັນຢ່າງເປັນທາງການ"
  ພາສາອື່ນອາດມີສຳນວນທີ່ສະແດງອອກຄ້າຍຄືກັນເພື່ອກ່າວເຖິງການຢ່າ.
- "ໃບຢ່າ" ອາດແປໄດ້ວ່າເປັນ "ເອກກະສານທີ່ລະບຸການສົມລົດໄດ້ສິ້ນສຸດລົງແລ້ວ".

## ການລົງໂທດ

### ນິຍາມ

ຄຳວ່າ "ການລົງໂທດ" ກ່າວເຖິງຄຳຕັດສິນລົງໂທດ ໂດຍບໍ່ມີການອຸທອນ ຫລື ຫລົບຫນີ.

- ເມື່ອຄົນອິດສະຣາເອນ ຖືກຈັບໄປເປັນສະເລີຍ ໃນກຸງບາບີໂລນ

ຜູ້ທຳນວຍ ເອເສກຽນ ໄດ້ກ່າວວ່າ "ການລົງໂທດ ໄດ້ມາເຫນືອ ພວກເຂົາແລ້ວ "

- ຄຳນີ ອາດແປວ່າ"ພັຍພິບັດ"ຫລື "ການລົງໂທດ"ຫລື "ພິນາດຢ່າງສິ້ນຫວັງ" ທັ້ງນີ ຂຶ້ນຢູ່ກັບບໍຣິບົດນັ້ນ.

## ການສັ່ງຫານ

### ນິຍາມ

ຄຳວ່າ "ການສັ່ງຫານ"ອ້າງເຖິງການຂ້າສັດຫລືຄົນຈຳນວນຫລາຍ ຫລືການ ຂ້າແບບທາລຸນ
ແລະຄຳນີ້ຍັງອ້າງເຖິງການຂ້າສັດເພື່ອເປັນອາຫານດ້ວຍ.

- ເມື່ອອັຍຣາຮາມໄດ້ຕ້ອນຮັບແຂກສາມຄົນທີ່ເຕັ້ນທຂອງທ່ານໃນທະເລຊາຍ
  ທ່ານໄດ້ສັ່ງຄົນຮັບໃຊ້ຂອງທ່ານໃຫ້ຂ້າແລະໃຫ້ປຸງຊີ້ນງົວສຳລັບເປັນອາຫານໃຫ້ແຂກຂອງທ່ານທັ້ງສາມຄົນ.
- ຜູ້ປະກາດພຣະທຳເອເສກຽນພະຍາກອນວ່າພຣະເຈົ້າຈະສົ່ງທູດສະຫວັນຂອງພະອົງສັ່ງຫານຄົນທັ້ງໝົດທີ່ບໍ່ຕິດຕາມພຣະຄຳຂອງພະອົງ.
- ໃນພະທຳ 1ຊາມູເອນໄດ້ບັນທຶກເຖິງການສັ່ງຫານເທືອໃຫຍ່ທີ່ຄົນອິດສະຣາເອນຖືກຂ້າ 30,000
  ຄົນໂດຍສັດຕູຂອງພວກທ່ານເພາະການບໍ່ເຊື່ອຟັງພຣະເຈົ້າ.
- "ອາວຸດທັ້ງຫລາຍໃນການສັ່ງຫານ"ສາມາດແປໄດ້ວ່າ"ອາວຸດທັ້ງຫລາຍສຳລັບການຂ້າ."
- ຄຳກ່າວທີ່ວ່າ, "ການສັ່ງຫານເປັນສິ່ງທີ່ຍິ່ງໃຫຍ່" ສາມາດແປໄດ້ວ່າ "ຄົນຈຳນວນຫລາຍຖືກຂ້າ" ຫລື
  "ຈຳນວນຜູ້ເສຍຊີວິດຫລວງຫລາຍ" ຫລື "ຈຳນວນປະຊາຊົນທີ່ຕາຍສູງຈົນໜ້າຢ້ານກົວ."
- ວິທີອື່ນທີ່ຈະແປຄຳວ່າ "ສັ່ງຫານ" ສາມາດລວມເຖິງ, "ຂ້າ" ຫລື "ປະຫານ "ຫລື "ການຂ້າ."


generated on Thu Jul 10 08:45:04 2025

## ການອວດອົ່ງທະນົງຕົວ

### ນິຍາມ

ຄຳວ່າ“ອວດອົ່ງທະນົງຕົວ“ ໝາຍຄວາມວ່າອວດອົ່ງຈອງຫອງ ຍ້ອງເຖິງບາງຄົນຄິດວ່າຕົວເອງດີເລີດສະຫລາດກວ່າຄົນອື່ນ ຫລືເປັນຄົນມັກເວົ້າຄຸຍໂມ້ເກີນຕົວ.

- ຫລາຍຄັ້ງຄຳນີ້ອະທິບາຍເຖິງຄວາມອວດຕົວເອງຂອງບຸກຄົນຜູ້ທີ່ຢືນຢັ້ນໃນການກຳລັງທຳຄວາມຜິດບາບຕໍ່ພຣະເຈົ້າ.
- ໂດຍປົກກະຕິບຸກຄົນທີ່ອວດອົ່ງຈອງຫອງມັກຄຸຍໂມ້ກ່ຽວກັບຕົວເຂົາເອງ.
- ບຸກຄົນທີ່ອວດອົ່ງຈອງຫອງແມ່ນເປັນຄົນໂງ່, ບໍ່ແມ່ນຄົນສະຫລາດ.
- ຄຳນີ້ສາມາດແປວ່າ“ອວດອົ່ງ“ ຫລື“ຈອງຫອງ“ເອົາຕົວເອງເປັນສູນກາງ
- ຄຳກ່າວຄຳອຸປະມາຫລືປຽບທຽບ“ຕາທີ່ຈອງຫອງ“ສາມາດແປວ່າ“ການມອງແບບຂົ່ມເຫັງຍົກຕົວເອງ“ ຫລື “ການເບິ່ງເຫັນຄົນອື່ນມີຄຸນຄ່ານ້ອຍກວ່າຕົນເອງ ຫລື “ບຸກຄົນມັກອວດອົ່ງຕົວເອງ,ມັກດູຖູກຄົນອື່ນວ່າຕ່ຳຕ້ອຍ.

## ການອັດສະຈັນ, ສິ່ງມະຫັດສະຈັນ, ໝາຍສຳຄັນ

### ນິຍາມ

"ການອັດສະຈັນ" ແມ່ນບາງສິ່ງທີ່ໜ້າງຶດງໍ້ປະຫລາດໃຈ ທີ່ບໍ່ໜ້າຈະເປັນໄປໄດ້ ນອກຈາກພຣະເຈົ້າ ຈະເຮັດໃຫ້ສິ່ງນັ້ນເກີດຂຶ້ນ.

- ຕົວຢ່າງການອັດສະຈັນທີ່ພຣະເຢຊູໄດ້ເຮັດແລ້ວ ເຊັ່ນ ຫ້າມລົມພາຍຸ ແລະ ຊ່ວຍຊາຍຕາບອດໃຫ້ເຫັນຮຸ່ງ.
- ບາງເທື່ອກໍເອີ້ນການອັດສະຈັນວ່າ "ມະຫັດສະຈັນ" ເພາະວ່າ ສິ່ງເຫລົ່ານັ້ນໄດ້ເຮັດໃຫ້ຄົນທັ້ງຫລາຍຮູ້ສຶກງຶດງໍ້ແລະປະຫລາດໃຈ.
- ຄຳວ່າ "ມະຫັດສະຈັນ" ຍັງສາມາດບົ່ງບອກເຖິງການສຳແດງຣິດທານຸພາບຂອງພຣະເຈົ້າໄດ້ອີກ, ເຊັ່ນ ຕອນພຣະອົງນິຣະມິດສ້າງຟ້າສະຫວັນ ແລະ ຜືນແຜ່ນດິນໂລກ.
- ການອັດສະຈັນ ສາມາດເອີ້ນອີກແບບໜຶ່ງວ່າ "ໝາຍສຳຄັນ" ເພາະວ່າສິ່ງເຫລົ່ານີ້ ແມ່ນບົ່ງບອກ ຫລື ເປັນຫລັກຖານບອກວ່າ ພຣະເຈົ້າຊົ່ງເຕັມດ້ວຍຣິດທານຸພາບສູງສຸດ ຊົ່ງຢູ່ເໜືອໂລກຈັກກະວານນີ.
- ການອັດສະຈັນບາງຢ່າງ ແມ່ນການຊ່ວຍໄຖ່ໃຫ້ພົ້ນຂອງພຣະເຈົ້າ, ເຊັ່ນ ຕອນທີ່ພຣະອົງ ຊ່ວຍຊົນຊາດອິດສະຣາເອນໃຫ້ພົ້ນຈາກການເປັນທາດໃນປະເທດເອຢິບ ແລະ ຕອນທີ່ພຣະອົງຊ່ວຍຣັກສາ ດານີເອນ ໃຫ້ພົ້ນຈາກການກັດກິນຂອງສິງໂຕ ເປັນຕົ້ນ.
- ການອັດສະຈັນອື່ນໆ ອາດຈະໝາຍເຖິງການພິພາກສາຂອງພຣະເຈົ້າ, ເຊັ່ນ ຕອນພຣະອົງເຮັດໃຫ້ນ້ຳຖ້ວມໂລກໃນສະໄໝຂອງໂນອາ ແລະ ຕອນທີ່ພຣະອົງ ສົ່ງໄພພິບັດມາເໜືອແຜ່ນດິນປະເທດເອຢິບ ໃນສະໄໝຂອງໂມເຊ.
- ການອັດສະຈັນຫລາຍຢ່າງຂອງພຣະເຈົ້າ ແມ່ນການປົ່ນປົວຣັກສາຄົນເຈັບໄຂ້ປ່ວຍໂຊ ຫລື ເຮັດໃຫ້ຄົນທີ່ຕາຍແລ້ວ ເປັນຄືນຂຶ້ນມາມີຊີວິດອີກ.
- ຣິດອຳນາດຂອງພຣະເຈົ້າ ຈະສຳແດງຜ່ານທາງພຣະເຢຊູເຈົ້າ ໃນຂະນະທີ່ພຣະອົງຊ່ວຍປົ່ນປົວຣັກສາຄົນ, ຫ້າມລົມພາຍຸ, ຍ່າງເທິງໜ້ານ້ຳ, ແລະ ຊ່ວຍຄົນໃຫ້ເປັນຄືນມາຈາກຕາຍ. ສິ່ງທັ້ງໝົດນີ້ແມ່ນການອັດສະຈັນ.
- ພຣະເຈົ້າ ຍັງໃຊ້ພວກຜູ້ປະກາດພຣະທັມ ແລະ ພວກອັກຄະສາວົກ ເຮັດການອັດສະຈັນ ເພື່ອປົ່ນປົວຣັກສາ ແລະ ເຮັດຫລາຍສິ່ງຫລາຍຢ່າງ ໃຫ້ເປັນໄປໄດ້ ໂດຍຜ່ານທາງຣິດອຳນາດຂອງພຣະເຈົ້າ ເທົ່ານັ້ນ.

### ຄຳແນະນຳໃນການແປ

- ການແປທີ່ເປັນໄປໄດ້ສຳລັບຄຳວ່າ "ການອັດສະຈັນ" ຫລື "ສິ່ງມະຫັດສະຈັນ" ສາມາດແປໄດ້ວ່າ, "ສິ່ງທີ່ເປັນໄປບໍ່ໄດ້ ພຣະເຈົ້າຈະເຮັດສິ່ງນັ້ນ" ຫລື "ພາລະກິດທີ່ເຕັມດ້ວຍຣິດທານຸພາບຂອງພຣະເຈົ້າ" ຫລື "ການກະທຳທີ່ມະຫັດສະຈັນຂອງພຣະເຈົ້າ."
- ຄຳກ່າວທີ່ໄດ້ຍິນຢູ່ເລື້ອຍໆ ວ່າ "ໝາຍສຳຄັນ ແລະ ການອັດສະຈັນ" ສາມາດແປໄດ້ວ່າ "ຂ້ພິສູດ ແລະ ການອັດສະຈັນ" ຫລື "ກິດຈະການອັນອັດສະຈັນທີ່ໄດ້ພິສູດອຳນາດຂອງພຣະເຈົ້າ" ຫລື "ການອັດສະຈັນທີ່ມະຫັດສະຈັນ ເຊິ່ງໄດ້ສຳແດງຄວາມຍິ່ງໃຫຍ່ຂອງພຣະເຈົ້າ."
- ໝາຍເຫດ ຄວາມໝາຍຂອງໝາຍສຳຄັນ ເຊິ່ງເປັນເລື່ອງທີ່ໜ້າເຫລືອເຊື່ອນັ້ນ ຕ່າງກັບຄວາມໝາຍຂອງໝາຍສຳຄັນ ເຊິ່ງເປັນການພິສູດ ຫລື ເປັນຫລັກຖານສຳລັບບາງສິ່ງ. ທັ້ງສອງຢ່າງສາມາດເຊື່ອມຕໍ່ເຖິງກັນໄດ້.


generated on Thu Jul 10 08:45:04 2025

## ການຮັກສາ, ບໍາບັດຢຽວຢາ

### ນິຍາມ

ຄໍາວ່າ "ການຖືກຮັກສາ" ແລະ "ຢຽວຢາ" ທັ້ງສອງຄໍາໝາຍຄວາມວ່າ ເປັນເຫດໃຫ້ຄວາມເຈັບປ່ວຍ, ບາດແຜ, ຫລືບຸກຄົນພິການ ກັບມາມີສຸກຂະພາບດີອີກເທື່ອ.

- ບຸກຄົນທີ່ໄດ້ຮັບການ "ຖືກຮັກສາ" ຫລື "ຢຽວຢາ" ໄດ້ຖືກເຮັດໃຫ້ "ຫາຍດີ" ຫລື "ເຮັດໃຫ້ສຸກຂະພາບດີ."
- ການຖືກຮັກສາສາມາດເກີດໂດຍທໍາມະຊາດ
  ເນື່ອງຈາກພຣະເຈົ້າໄດ້ໃຫ້ຮ່າງກາຍຂອງເຮົາມີຄວາມສາມາດທີ່ຈະພັກຟື້ນຈາກບາດແຜຫລາຍຊະນິດແລະຫລາຍພະຍາດ.
  ການຖືກຮັກສາໃຫ້ຫາຍແບບນີ້ໂດຍປົກກະຕິຈະເກີດຂຶ້ນຢ່າງຊ້າໆ.
- ຢ່າງໃດກໍຕາມ, ເງື່ອນໄຂທີ່ແນ່ນອນຢ່າງເຊັ່ນຕາບອດຫລືເປັນງ່ອຍແລະພະຍາດທີ່ສາຫັດ. ຢ່າງເຊັ່ນພະຍາດຂີ້ທູດທີ່ບໍ່ຫາຍດ້ວຍຕົວເອງ
  ເມື່ອປະຊາຊົນໄດ້ຮັບການຖືກຮັກສາໃຫ້ຫາຍຈາກພະຍາດເຫລົ່ານີ້. ເປັນສິ່ງມະຫັດສະຈັນທີ່ປົກກະຕິຈະເກີດຂຶ້ນທັນທີທັນໃດ.
- ຕົວຢ່າງເຊັ່ນ, ພຣະເຢຊູຊົງຮັກສາປະຊາຊົນເປັນຈໍານວນຫລາຍທີ່ຕາບອດ ເປັນງ່ອຍ ຫລືພະຍາດຕ່າງໆ
  ແລະພວກເຂົາໄດ້ຫາຍໂດຍທັນທີ.
- ພວກສາວົກກໍຮັກສາປະຊາຊົນໃຫ້ຫາຍດ້ວຍການອັດສະຈັນເຊັ່ນກັນ, ເຊັ່ນເປໂຕເຮັດໃຫ້ຄົນງ່ອຍສາມາດຍ່າງໄດ້ທັນທີ.

## ການເຍາະເຍີ້ຍ, ເວົ້າຖາກຖາງ, ສຽດສີ, ຜູ້ເຍາະເຍີ້ຍ

### ນິຍາມ

ຄໍາວ່າ "ການເຍາະເຍີ້ຍ," "ເວົ້າຖາກຖາງ," ແລະ "ສຽດສີ" ທັ້ງໝົດນີ້ບົ່ງບອກເຖິງ ການເຮັດບາງສິ່ງທີ່ເປັນເລື່ອງມ່ວນສໍາລັບບາງຄົນ, ແຕ່ເປັນເລື່ອງມ່ວນໃນທາງບໍ່ດີ.

- ຫລາຍເທື່ອ ທີ່ການເຍາະເຍີ້ຍ ແມ່ນລວມທັ້ງເລື່ອງການຮຽນ ແບບຄໍາເວົ້າ ຫລື ຮຽນແບບການກະທໍາຂອງຄົນອື່ນ
  ເພື່ອເຮັດໃຫ້ຄົນນັ້ນຮູ້ສຶກອັບອາຍຂາຍໜ້າ ຫລື ສະແດງການດູໝິ່ນຕໍ່ພວກເຂົາ.
- ທະຫານໂຣມ ໄດ້ເວົ້າເຍາະເຍີ້ຍ ຫລື ເວົ້າຖາກຖາງໃສ່ພຣະເຢຊູເຈົ້າ ໃນຕອນທີ່ພວກເຂົາເອົາເສື້ອມາມຸ່ງໃຫ້ພຣະອົງ ແລະ
  ເຮັດຕີໃຫ້ກຽດວ່າ ພຣະອົງເປັນກະສັດ.
- ກຸ່ມຂອງຄົນໜຸ່ມໄດ້ເວົ້າຖາກຖາງ ຫລື ເວົ້າສຽດສີໃສ່ເອລີຊາ ໃນເວລາທີ່ພວກເຂົາເອີ້ນຊື່ຂອງລາວ, ຫົວຂວັນຫົວລ້ານຂອງລາວ.
- ຄໍາວ່າ "ສຽດສີ" ຍັງບົ່ງບອກເຖິງການເຍາະເຍີ້ຍຄວາມຄິດນັ້ນວ່າ ບໍ່ເປັນຕາໜ້າເຊື່ອຖື ຫລື ບໍ່ສໍາຄັນ.
- "ຜູ້ເຍາະເຍີ້ຍ" ແມ່ນບາງຄົນທີ່ມັກເຍາະເຍີ້ຍ ຫລື ມັກສຽດສີຢູ່ເລື້ອຍໆ.

## ການໃຫ້ອະໄພ

### ນິຍາມ

ຄໍາວ່າ ການໃຫ້ອະໄພ ໝາຍຄວາມວ່າ ການຍົກໂທດແລະບໍ່ລົງໂທດບາງຄົນສໍາລັບບາບຂອງເຂົາ.

- ຄໍານີ້ມີຄວາມໝາຍດຽວກັນກັບຄໍາວ່າ ຍົກໂທດ ຍັງຄວາມໝາຍຂອງການຕັດສິນຢ່າງເປັນທາງການທີ່ຈະບໍ່ລົງໂທດຜູ້ມີຄວາມຜິດ
- ທີ່ສານຕັດສິນ ຜູ້ພິພາກສາສາມາດຍົກໂທດບຸກຄົນທີ່ມີຄວາມຜິດໄດ້.
- ເຖິງແມ່ນວ່າເຮົາຈະມີຄວາມຜິດບາບ ພຣະຢຊູຄຣິດຊົງອະໄພແກ່ເຮົາບໍ່ໃຫ້ເຮົາຕົກນາຮົກ
  ໂດຍການສິ້ນພຣະຊົນຂອງພຣະອົງເທິງໄມ້ກາງແຂນ

### ຄໍາແນະນໍາໃນການແປ

- ໃນພາສານີ້ໝາຍເຖິງການຕັດສິນໃຈຢ່າງເປັນທາງການທີ່ຈະໃຫ້ອະໄພ ຄໍານັ້ນສາມາດໃຊ້ໃນການແປຄໍານີ້ໄດ້.
- ຄໍານີ້ສາມາດແປຄືກັບຄໍາວ່າ "ຍົກໂທດ" ແລະ "ການຍົກໂທດ."

## ການໄຫລເລືອດ

### ນິຍາມ

ຄໍາວ່າ“ ການໄຫລເລືອດ” ໝາຍ ເຖິງການຕາຍຂອງມະນຸດຍ້ອນການຄາດຕະກໍາ, ສົງຄາມຫລືການກະທໍາຮຸນແຮງອື່ນໆ.

- ຄໍານີ້ມີຄວາມໝາຍວ່າ "ເລືອດໄຫລອອກ," ໝາຍເຖິງເວລາທີ່ເລືອດອອກຈາກຮ່າງກາຍຂອງຄົນຈາກບາດແຜເປີດ.


generated on Thu Jul 10 08:45:04 2025

- ຄໍາວ່າ“ ການໄຖ່ຄ່າໄຖ່” ມັກຖືກໃຊ້ເພື່ອອ້າງເຖິງການຂ້າຄົນຢ່າງແຜ່ຫຼາຍ.
- ມັນຍັງຖືກນໍາໃຊ້ເປັນຂໍ້ອ້າງອີງຫຼືວໄປກ່ຽວກັບຍາບຂອງການຄາດຕະກໍາ.

### ຄໍາ ແນະນໍາໃນການແປ

- "ການໄຖ່ຄ່າໄຖ່ຄ່າ" ອາດຈະຖືກແປເປັນ "ການຂ້າຄົນ" ຫຼື "ຄົນ ຈໍານວນຫລວງຫລາຍທີ່ຖືກຂ້າ."
- "ໂດຍຜ່ານການໄຖ່ຄ່າໄຖ່ຄ່າ" ຍັງສາມາດຖືກແປເປັນ "ການຂ້າຄົນ."
- "ການໄຖ່ຄ່າໄຖ່ຄ່າທີ່ບໍລິສຸດ"ສາມາດຖືກແປວ່າ "ຂ້າຄົ"ບໍລິສຸດ."
- "ການໄຖ່ຄ່າໄຖ່ຄ່າຄັ້ງຕໍ່ໄປນີ້ແມ່ນການໄຖ່ຄ່າໄຖ່ຄ່າ" ອາດຈະຖືກແປວ່າ, "ພວກເຂົາສືບຕໍ່ຂ້າຄົນ" ຫຼື "ການຂ້າຄົນຕໍ່ໄປ" ຫຼື "ພວກເຂົາໄດ້ຂ້າຄົນຫລາຍຄົນແລະຍັງສືບຕໍ່ເຮັດແບບນັ້ນ" ຫຼື "ຄົນເຮົາຍັງຂ້າຄົນອື່ນຢູ່ຕໍ່ໄປ."
- ການນໍາໃຊ້ຕົວເລກອື່ນ, "ການໄຖ່ຄ່າໄຖ່ຄ່າຈະຕາມຫາທ່ານ" ສາມາດຖືກແປເປັນ "ປະຊາຊົນຂອງທ່ານຈະສືບຕໍ່ປະສົບກັບການໄຖ່ຄ່າໄຖ່ຄ່າ" ຫຼື "ປະຊາຊົນຂອງທ່ານຈະສືບຕໍ່ຖືກຂ້າຕາຍ" ຫຼື "ປະຊາຊົນຂອງທ່ານຈະສືບຕໍ່ເຮັດສິ່ງຄ້ານກັບປະເທດອື່ນແລະປະຊາຊົນຕາຍຈະຮັກສາແລ້ວ. "

## ການໝິ່ນປະໝາດ, ການປະໝາດ , ດູໝິ່ນ

### ນິຍາມ

ໃນພຣະຄໍາພີ, ຄໍາວ່າ "ໝິ່ນປະໝາດ" ໝາຍເຖິງການເວົ້າໃນແບບທີ່ສະແດງຄວາມບໍ່ເຄົາລົບຕໍ່ພຣະເຈົ້າຫລືຜູ້ຄົນ. ການ“ ໝິ່ນປະໝາດ” ຜູ້ໃດຜູ້ໜຶ່ງແມ່ນເວົ້າໃສ່ຄົນນັ້ນເພື່ອໃຫ້ຄົນອື່ນຄິດບາງຢ່າງທີ່ບໍ່ຖືກຕ້ອງຫຼືບໍ່ດີກ່ຽວກັບລາວ.

- ສ່ວນຫລາຍການເວົ້າໝິ່ນປະໝາດພຣະເຈົ້າໝາຍເຖິງການເວົ້າໃສ່ຮ້າຍລື ດູຖູກລາວໂດຍການເວົ້າສິ່ງທີ່ບໍ່ແມ່ນຄວາມຈິງກ່ຽວກັບລາວຫຼືໂດຍການປະຕິດທີ່ບໍ່ສົມຄວນທີ່ເຮັດໃຫ້ກຽດຊັງລາວ.
- ມັນເປັນການໝິ່ນປະໝາດສໍາລັບມະນຸດທີ່ອ້າງວ່າຕົນເປັນພຣະເຈົ້າຫລືອ້າງວ່າມີພຣະເຈົ້າອື່ນນອກເໜືອຈາກພຣະເຈົ້າທ່ຽງແທ້.
- ສະບັບພາສາອັງກິດບາງສະບັບແປຄໍານີ້ວ່າ "ໃສ່ຮ້າຍປ້າຍສີ" ເມື່ອເວົ້າເຖິງການໝິ່ນປະໝາດຄົນ.

### ຄໍາແນະນໍາໃນການແປ

- ເພື່ອ“ ໝິ່ນປະໝາດ” ສາມາດຖືກແປເປັນ,“ ເວົ້າໃສ່ຮ້າຍ” ຫຼື“ ດູຖູກພຣະເຈົ້າ” ຫຼື“ ໝິ່ນປະໝາດ”.
- ວິທີການແປ "ການ ໝິ່ນປະໝາດ" ສາມາດປະກອບມີ, "ເວົ້າຜິດກັບຄົນອື່ນ" ຫຼື "ເວົ້າເຍາะເຍີ້ຍ" ຫຼື "ເຜີຍແຜ່ຂ່າວລືທີ່ບໍ່ຖືກຕ້ອງ."

## ການບໍລິຫານ, ຜູ້ບໍລິຫານ

### ນິຍາມ

ຄໍາວ່າ "ການບໍລິຫານ" ແລະຄໍາວ່າ "ຜູ້ບໍລິຫານ" ໝາຍເຖິງການບໍລິຫານ ຫລືການປົກຄອງປະຊາກອນຂອງປະເທດເພື່ອຊ່ວຍໃຫ້ເຮັດວຽກໄດ້ຢ່າງເປັນລະບຽບ.

- ດານີເອນແລະຊາຍໜຸ່ມສາມຄົນຖືກແຕ່ງຕັ້ງໃຫ້ເປັນຜູ້ບໍລິຫານ ຫລືເປັນຂ້າຣາຊການເບິ່ງແຍງ, ບາງສ່ວນຂອງກຸງບາບີໂລນ.
- ໃນພຣະສັນຍາໃໝ່ຄໍາວ່າ "ການບໍລິຫານ" ຖືກໃຊ້ເພື່ອເວົ້າເຖິງງຂອງປະທານຝ່າຍພຣະວິນຍານບໍຣິສຸດຢ່າງນຶ່ງ.
- ຜູ້ທີ່ມີຂອງປະທານຝ່າຍວິນຍານເລື່ອງການບໍລິຫານຈະສາມາດນໍາແລະປົກຄອງຜູ້ອື່ນໄດ້ ນອກນັ້ນລາວຍັງສາມາດດູແລການຮັກສາອາຄານແລະຊັບສິນຂອງຄົນອື່ນໆ.

### ຄໍາແນະນໍາໃນການແປ

- ໃນບາງກໍລະນີ ອາດຈະແປຄໍາວ່າ "ຜູ້ບໍລິຫານ" ໄດ້ອີກຢ່າງໜຶ່ງວ່າ "ຜູ້ວ່າຣາຊການ" ຫຼື "ຜູ້ຮວບຮວມ" ຫຼື "ຜູ້ຈັດການ" ຫຼື "ຜູ້ປົກຄອງ" ຫຼື "ຂ້າຣາຊການ."
- ຄໍາວ່າ "ການບໍລິຫານ" ອາດແປໄດ້ອີກວ່າ "ການປົກຄອງດູແລ" ຫຼື "ການບໍລິຫານຈັດການ" ຫຼື "ການເປັນຜູ້ນໍາ" ຫຼື "ການຈັດການຮວບຮວມ."
- ຄໍາວ່າ "ຮັບຜິດຊອບສິ່ງຂອງ" ຫຼື "ຈັດການສິ່ງຂອງ" ຫຼື "ຮັກສາລະບຽບ" ສາມາດນໍາມາໃຊ້ເປັນສ່ວນໜຶ່ງຂອງການແປຄໍານີ້ດ້ວຍ.

(ເບິ່ງເພີ່ມເຕີມ: Babylon, Daniel, gift, governor, Hananiah, Mishael, Azariah)


generated on Thu Jul 10 08:45:04 2025

## ການຮັບເປັນລູກ

### ນິຍາມ

ຄຳວ່າ "ການຮັບເປັນລູກ" ເວົ້າເຖິງການທີ່ບາງຄົນໄດ້ກາຍເປັນລູກຢ່າງຖືກຕ້ອງຕາມກົດໝາຍຂອງບຸກຄົນອື່ນ ທີ່ບໍ່ແມ່ນພໍ່ແມ່ຄົງ.

- ພຣະຄຳພີໃຊ້ຄຳວ່າ "ການຮັບເປັນລູກ" ຫລື "ຮັບເປັນລູກ" ເປັນພາບປຽບທຽບເພື່ອອະທິບາຍວ່າພຣະເຈົ້າເຮັດໃຫ້ຄົນໄດ້ມີສ່ວນໃນຄອບຄົວຂອງພຣະອົງ, ແລະຊົງເຮັດໃຫ້ພວກເຂົາເປັນລູກຊາຍແລະລູກຍິງຝ່າຍວິນຍານຂອງພຣະອົງໄດ້ຢ່າງໃດ.
- ໃນຖານະລູກລ້ຽງ ພວກຜູ້ເຊື່ອເປັນຜູ້ຮັບມໍຣະດົກຮ່ວມກັນກັບພຣະເຢຊູຄຣິດ, ພວກເຂົາເຈົ້າມີສິດພິເສດຂອງລູກຊາຍລູກຍິງຂອງພຣະເຈົ້າ.

### ຄຳແນະນຳໃນການແປ

- ຄຳນີ້ອາດແປໂດຍໃຊ້ຄຳຂອງພາສານັ້ນໆ ທີ່ເຮົາຈະແປເພື່ອອະທິບາຍເຖິງຄວາມສຳພັນພິເສດຂອງພໍ່ແມ່ແລະລູກ. ແຕ່ໃຫ້ແນ່ໃຈວ່າຄຳນີ້ມີຄວາມໝາຍທີ່ເປັນພາບປຽບທຽບຫລືຄວາມໝາຍຝ່າຍວິນຍານ.
- ຄຳທີ່ວ່າ "ການຖືກຮັບເປັນລູກ" ກໍອາດແປໄດ້ວ່າ "ພຣະເຈົ້າໄດ້ຊົງຮັບໃຫ້ເປັນລູກຂອງພຣະອົງ" ຫລື "ເປັນລູກຂອງພຣະເຈົ້າຝ່າຍວິນຍານ."

(ເບິ່ງເພີ່ມເຕີມ: heir, inherit, spirit)

## ການເປັນຊູ້, ເປັນຊູ້, ຊາຍຊູ້, ຍິງຊູ້

### ນິຍາມ

ຄຳວ່າ "ການເປັນຊູ້" ເວົ້າເຖິງຄວາມບາບທີ່ກ່ຽວຂ້ອງກັບຄົນທີ່ແຕ່ງງານແລ້ວໄປມີເພດສຳພັນກັບຄົນອື່ນທີ່ບໍ່ແມ່ນຄູ່ຄອງຂອງຕົນເອງ. ຄຳວ່າ "ເປັນຊູ້" ອະທິບາຍເຖິງການເຮັດແບບນີ້ຫລືບຸກຄົນທີ່ເຮັດຄວາມບາບແບບນີ້.

- ຄຳວ່າ "ຊາຍຊູ້" ໂດຍທົ່ວໄປເວົ້າເຖິງໃຜກໍໄດ້ທີ່ເປັນຊູ້.
- ບາງຄັ້ງຄຳວ່າ "ຍິງຊູ້" ຖືກໃຊ້ສະເພາະກັບຜູ້ຍິງທີ່ເປັນຊູ້.
- ການເປັນຊູ້ທຳລາຍຄຳສັນຍາທີ່ຜົວເມຍໄດ້ໃຫ້ຕໍ່ກັນໃນຄຳສັນຍາຂອງການແຕ່ງດອງຂອງພວກເຂົາ.
- ພຣະເຈົ້າຊົງໄດ້ບັນຊາຫ້າມຄົນອິສະຣາເອນຫລີ້ນຊູ້.
- ຄຳວ່າ "ເປັນຊູ້" ມັກໃຊ້ເປັນຮູບປຽບທຽບເພື່ອອະທິບາຍເຖິງປະຊາຊົນອິສະຣາເອນທີ່ບໍ່ຊື່ສັດຕໍ່ພຣະເຈົ້າໂດຍສະເພາະຢ່າງຍິ່ງເມື່ອພວກເຂົາໄດ້ໄປນະມັສການພຣະອື່ນ.

### ຄຳແນະນຳໃນການແປ

- ຖ້າພາສາທີ່ຈະແປນັ້ນບໍ່ມີຄຳທີ່ໝາຍຄວາມວ່າ "ການເປັນຊູ້" ຄຳນີ້ກໍອາດຈະແປວິທີອື່ນເຊັ່ນ "ການໄປນອນກັບຜົວຫລືເມຍຂອງຄົນອື່ນ" ຫລື "ການຫລີ້ນຊູ້."
- ບາງພາສາອາດຈະເວົ້າເລື່ອງການເປັນຊູ້ແບບທາງອ້ອມເຊັ່ນ "ການນອກໃຈກັນ" ຫລື "ການບໍ່ສັດຊື່ຕໍ່ຄອບຄົວ."

(ເບິ່ງເພີ່ມເຕີມ: commit, covenant, sexual immorality, sleep with, faithful)

## ກາຢະຝາ

### ຂໍ້ເທັດຈິງ

ກາຢະຝາ ເປັນມະຫາປະໂລຫິດຂອງອິສຣະເອນ ໃນສະໄໝຂອງໂຢຮັນຜູ້ໃຫ້ບັບຕິສະມາແລະພຣະເຢຊູ.

- ກາຢະຝາມີບົດບາດສຳຄັນໃນການສືບສວນແລະລົງໂທດພຣະເຢຊູ.
- ມະຫາປະໂລຫິດອັນນາແລະກາຢະຝາເປັນຜູ້ທີ່ຢູ່ໃນການສືບສວນເປໂຕແລະໂຢຮັນທຸກເທື່ອທີ ພວກເຂົາຖືກຈັບຫລັງຈາກຮັກສາຄົນເປັນອຳມະພາດໃຫ້ຫາຍດີ.
- ກາຢະຝາເປັນຄົນທີ່ເວົ້າວ່າເປັນການດີທີ່ຈະໃຫ້ຄົນດຽວຕາຍເພື່ອຄົນທັງຊາດ ດີກວ່າຈະໃຫ້ຄົນທັງຊາດຕ້ອງພິນາດ ພຣະເຈົ້າຊົງໃຫ້ເຂົາເວົ້າເວົ້າເຊັ່ນນີ້ຕາມທີ່ຄຳທຳນວາຍກ່ຽວກັບການທີ

ພຣະເຢຊູຈະຊົງສິ້ນພຣະຊົນເພື່ອຊ່ວຍໄພ່ພົນຂອງພຣະອົງໃຫ້ລອດ.


generated on Thu Jul 10 08:45:04 2025

## ກາບາ

### ຂ້ເທັດຈິງ

ກາບາເປັນຫມູ່ບ້ານຫລືເມືອງໃນແຄ້ວນຄາລີເລ ຕັ້ງຢູ່ທາງຕອນເຫນືອຂອງເມືອງນາຊາເຣັດ ຫ່າງອອກໄປປະມານ 9 ໄມ

- ກາບາເປັນບ້ານເກີດຂອງນາທານາເອັນທີເປັນຄົນຫນຶ່ງໃນສາວົກສິບສອງຄົນ.
- ພຣະເຢຊູສະເດັດໄປຮ່ວມງານແຕ່ງງານໃນຫມູ່ບ້ານກາບາ ແລະຊົງທໍາການອັດສະຈັນຄັ້ງທໍາອິດທີ່ນັ້ນ ໂດຍພຣະອົງໄດ້ຊົງປ່ຽນນ້ໍາໃຫ້ເປັນເຫລົ້າອງຸ່ນ.

ຫລັງຈາກນັ້ນ ບາງຄັ້ງພຣະເຢຊູ ໄດ້ສະເດັດກັບໄປຫມູ່ບ້ານກາບາ
ແລະໄດ້ພົບກັບຂ້າຣາຊການຄົນຫນຶ່ງຈາກກາເປນາອູມທີ່ໄດ້ຂໍຮ້ອງໃຫ້ພຣະອົງຮັກສາລູກຊາຍຂອງເຂົາ.

## ກາບາອານ, ຄົນກາບາອານ

### ຂ້ເທັດຈິງ

ກາບາອານເປັນລູກຊາຍຂອງຮາມ ຜູ້ຊຶ່ງເປັນລູກຊາຍຄົນຫນຶ່ງ ຂອງໂນອາ ຊາວກາບາອານສືບເຊື້ອສາຍມາຈາກກາບາອານ.

- ຄໍາວ່າ "ກາບາອານ"ຫລື "ແຜ່ນດິນກາບາອານ" ກ່າວເຖິງບໍລິເວນແຜ່ນດິນລະຫວ່າງແມ່ນ້ໍາຈໍແດນກັບທະເລເມດິເຕຣາເນ ຂະຫຍາຍອອກໄປທາງໃຕ້ຈົນເຖິງເຂດແດນຂອງປະເທດເອຢິບ ແລະທາງຕອນເໜືອຂຶ້ນໄປເຖິງເຂດແດນຂອງປະເທດຊີເຣຍ.
- ແຜ່ນດິນນີ້ເປັນທີ່ຢູ່ອາໃສຂອງຊາວກາບາອານ ລວມທັງກຸ່ມຄົນອື່ນໆອີກຫລາຍກຸ່ມ.
- ພຣະເຈົ້າຊົງສັນຍາວ່າຈະມອບແຜ່ນດິນກາບາອານໃຫ້ກັບອັບຣາຮາມແລະເຊື້ອສາຍຂອງທ່ານຄືຄົນອິສະຣາເອນ.

## ກາອິນ

### ຂ້ເທັດຈິງ

ກາອິນແລະອາເບນນ້ອງຊາຍຂອງເຂົາ ເປັນລູກຊາຍສອງຄົນທໍາອິດຂອງອາດາມກັບເອວາທີ່ກ່າວໄວ້ໃນພຣະຄັມພີ.

- ກາອິນເປັນຊາວສວນປູກຝັ່ງພືດ ໃນຄະນະ ທີ່ອາເບນເປັນຄົນລ້ຽງແກະ.
- ກາອິນຂ້າອາເບນນ້ອງຊາຍຂອງເຂົາ ເນື່ອງດ້ວຍຄວາມອິດສາ

ເພາະພຣະເຈົ້າໄດ້ຊົງຮັບເອົາເຄື່ອງຖວາຍຂອງອາເບນ ແຕ່ບໍ່ຮັບເຄື່ອງຖວາຍຂອງກາອິນ.

- ໃນການລົງໂທດ ພຣະເຈົ້າໄດ້ຊົງໄລ່ເຂົາອອກໄປຈາກເອເດນ ແລະບອກເຂົາວ່າແຜ່ນດິນຈະບໍ່ໃຫ້ພືດຜັກແກ່ເຂົາອີກຕໍ່ໄປ.
- ພຣະເຈົ້າໄດ້ເຮັດເຄື່ອງໝາຍທີ່ໜ້າຜາກຂອງກາອິນເພື່ອເປັນສັນຍາລັກວ່າພຣະເຈົ້າຈະຊົງປົກປ້ອງເຂົາຈາກຄົນອື່ນໆ ທີ່ຈະຂ້າເຂົາ ເມື່ອເຂົາພະເນຈອນໄປ.

## ກາເປນາອູມ

### ຂ້ເທັດຈິງ

ກາເປນາອູມເປັນໝູ່ບ້ານຊາວປະມົງທີ່ຢູ່ແຄມຝັ່ງຕາເວັນຕົກສ່ຽງເໜືອຂອງທະເລຄາລີເລ

- ພຣະເຢຊູຊົງພັກອາໄສຢູ່ໃນຫມູ່ບ້ານກາເປນາອູມໃນຂະນະທີ່ພຣະອົງຊົງກໍາລັງສັ່ງສອນໃນແຄ້ວນຄາລີເລ.
- ພວກສາວົກຂອງພຣະອົງຫລາຍຄົນມາຈາກກາເປນາອູມ.
- ພຣະເຢຊູຊົງເຮັດການອັດສະຈັນຫລາຍຄັ້ງໃນເມືອງນີ້ ຮວມທັງເຮັດໃຫ້ເດັກນ້ອຍຜູ້ຍິງຄົນຫນຶ່ງກັບຄືນມາມີຊີວິດ.
- ກາເປນາອູມ ເປັນເມືອງນຶ່ງໃນສາມເມືອງທີ່ພຣະເຢຊູຊົງຕໍານິຕໍ່ໜ້າຊຸມຊົນ ເພາະຜູ້ຄົນຂອງເມືອງນີ້ປະຕິເສດພຣະອົງແລະ ບໍ່ສັດທາ ໃນຖ້ອຍຄໍາຂອງພຣະອົງ ພຣະອົງໄດ້ຊົງເຕືອນພວກເຂົາວ່າ ພຣະເຈົ້າຈະລົງໂທດພວກເຂົາ ເພາະຄວາມບໍ່ສັດທາຂອງພວກເຂົາ.


generated on Thu Jul 10 08:45:04 2025

## ກາເມນ, ພູເຂົາກາເມນ

### ຂໍ້ເທັດຈິງ

"ພູເຂົາກາເມນ" ໄດ້ກ່າວເຖິງພູເຂົາທີ່ຕັ້ງຕາມຊາຍຝັ່ງທະເລເມດິເຕຣາເນຫາງຕອນເໜືອຂອງທີຣາບທີພຽງ ຈຸດທີ່ສູງສຸດຂອງພູເຂົານີ້ສູງ 546ແມັດ

- ມີເມືອງໜຶ່ງມີຊື່ວ່າ "ກາເມນ" ຕັ້ງຢູ່ພາກເໜືອຂອງຢູດາ. ເຊິ່ງເປັນພາກໃຕ້ຂອງທະເລຊາຍ
- ທ່ານນາບານ
  ເຈົ້າຂອງທີ່ດິນທີ່ລໍາລວຍກັບອາບີກາຍິນເມຍຂອງເຂົາອາໄສຢູ່ໃກ້ເມືອງກາເມນທີ່ຊຶ່ງດາວິດແລະຄົນຂອງທ່ານເຝົ້າຢາມໃຫ້ກັບຄົນລ້ຽງເກะຂອງນາບານ
- ທີພູເຂົາກາເມນນັ້ນ ເອລີຢາໄດ້ທ້າຫາຍຜູ້ທໍານວາຍຂອງພຣะບາອານໃຫ້ມີການແຂ່ງຂັນເພື່ອພິສູດໃຫ້ຮູ້ວ່າພຣะຢາໂຮວາຊຶ່ງເປັນພຣะເຈົ້າທີ່ແທ້ຈິງ.
- ເພື່ອຄວາມແຈ່ມແຈ້ງໃຫ້ຮູ້ວ່າ ຊື່ນີ້ບໍ່ແມ່ນພູເຂົາລູກດຽວ "ພູເຂົາກາເມນ" ສາມາດແປໄດ້ວ່າ "ພູເຂົາເທິງເນີນເຂົາກາເມນ" ຫຼື "ເນີນເຂົາກາເມນ".

## ກາເລັບ

### ຂໍ້ເທັດຈິງ

ກາເລັບເປັນຄົນໜຶ່ງໃນຄົນສອດແນມຊາວອິດສະຣາເອນສິບສອງຄົນທີ່ໂມເຊສົ່ງໄປສໍາລວດແຜ່ນດິນການາອານ.

- ເຂົາແລະໂຢຊວຍໄດ້ບອກປະຊາຊົນໃຫ້ວາງໃຈໃນພຣะເຈົ້າທີ່ຈະຊົ່ງຊ່ວຍພວກເຂົາໃຫ້ມີໄຊຊະນະເໜືອຊາວການາອານ.
- ໂຢຊວຍແລະກາເລັບເປັນພຽງຜູ້ຊາຍສອງຄົນເທົ່ານັ້ນໃນຄົນລຸ້ນຂອງເຂົາທີ່ໄດ້ຮັບອະນຸຍາດໃຫ້ເຂົ້າໄປໃນແຜ່ນດິນການາອານແຜ່ນດິນແຫ່ງພຣะສັນຍາ.
- ກາເລັບຮ້ອງຂໍໃຫ້ມອບແຜ່ນດິນເຮັບໂຣນແກ່ເຂົາແລະຄອບຄົວ. ເຂົາຮູ້ວ່າພຣะເຈົ້າໄດ້ຊົ່ງຊ່ອຍໃຫ້ເຂົາຊະນະຄົນທີ່ອາໄສຢູ່ທີ່ນັ້ນ.

## ກໍາຍານ

### ນິຍາມ

ກໍາຍານຄືນ້ໍາຫອມເຄື່ອງເທດທີ່ທໍາມາຈາກຢາງຂອງຕົ້ນໄມ້.ໃຊ້ເພື່ອທໍານ້ໍາຫອມແລະທູບ.

- ໃນສະໄໝພຣะຄັມພີ, ກໍາຍານເປັນເຄື່ອງເທດທີ່ສໍາຄັນທີ່ຖືກໃຊ້ເພື່ອຕຽມອາບສົບກ່ອນເອົາໄປຝັງ.
- ເຄື່ອງເທດນີ້ມີຄຸນຄ່າໃນການຮັກສາ ແລະສ້າງບັນຍາກາດທີ່ຜ່ອນຄາຍ.
- ເມື່ອໂຫລາຈານໄດ້ເດີນທາງມາຈາກທິດຕາເວັນອອກ ເພື່ອມາຫາພຣะກຸມມານເຢຊູທີ່ເມືອງເບດເລເຮັມ, ກໍາຍານຄືຂອງຂວັນນຶ່ງໃນສາມ ທີ່ພວກເຂົານໍາມາຖວາຍພຣะອົງ.

## ກໍານົດໄວ້ລ່ວງໜ້າ, ຖືກກໍານົດໄວ້ລ່ວງໜ້າ

### ນິຍາມ

ຄໍາວ່າ "ກໍານົດໄວ້ລ່ວງໜ້າ" ແລະ "ຖືກກໍານົດໄວ້ລ່ວງໜ້າແລ້ວ" ອ້າງເຖິງການຕັດສິນໃຈຫລືການວາງແຜນລ່ວງໜ້າວ່າບາງສິ່ງຈະເກີດຂຶ້ນ

- ຄໍານີ້ຈະອ້າງເປັນພິເສດເຖິງການກໍານົດໄວ້ລ່ວງໜ້າຂອງພະເຈົ້າໃຫ້ສໍາລັບຄົນທີ່ຈະໄດ້ຮັບຊີວິດນິຣັນດອນ
- ບາງເທື່ອກໍໃຊ້ຄໍາວ່າ "ກໍານົດລ່ວງໜ້າ" ຊຶ່ງໝາຍເຖິງການຕັດສິນໃຈໄວ້ລ່ວງໜ້າເຊັ່ນກັນ

### ຄໍາແນະນໍາໃນການແປ

- ຄໍາວ່າ "ກໍານົດໄວ້ລ່ວງໜ້າ" ສາມາດແປວ່າ "ຕັດສິນໃຈກ່ອນ" ຫລື "ຕັດສິນໃຈກ່ອນເວລາ"
- ຄໍາວ່າ "ກໍານົດໄວ້ລ່ວງໜ້າ" ສາມາດແປວ່າ "ໄດ້ຕັດສິນໃຈດົນມາແລ້ວ" ຫລື "ໄດ້ວາງແຜນກ່ອນເວລາ" ຫລື "ໄດ້ຕັດສິນໃຈກ່ອນເວລາແລ້ວ"
- ການໃຊ້ຖ້ອຍຄໍາ ຢ່າງເຊັ່ນ "ກໍານົດລ່ວງໜ້າພວກເຮົາ" ສາມາດແປວ່າ "ຕັດສິນໃຈດົນມາແລ້ວວ່າພວກເຮົາ" ຫລື "ຕິດສິນໃຈມາຮຽບຮ້ອຍແລ້ວກ່ອນເວລາທີ່ພວກເຮົາ"
- ໝາຍເຫດການແປຄໍານີ້ຄວນແຕກຕ່າງຈາກການແປຄໍາວ່າ "ຮູ້ຕ້ວລ່ວງໜ້າ"


generated on Thu Jul 10 08:45:04 2025

## ກຳມະຖັນ

### ນິຍາມ

ກຳມະຖັນແມ່ນສານສີເຫລືອງທີ່ກາຍເປັນຫາດແຫຼວທີ່ເຜົາຜານເມື່ອຖືກເຜົາ.

- ກຳມະຖັນຍັງມີກິ່ນທີ່ເໝັນແຮງຄືກັບກິ່ນຂອງໄຂ່ເນົ່າ.
- ໃນພຣະຄຳພີ, ການເຜົາກຳມະຖັນແມ່ນສັນຍາລັກຂອງການພິພາກສາຂອງພຣະເຈົ້າຕໍ່ຄົນທີ່ບໍ່ຊອບທຳແລະກະບົດ.
- ໃນສະໄໝຂອງໂລດ, ພຣະເຈົ້າໄດ້ສົ່ງຝົນໄຟແລະກຳມະຖັນໃສ່ເມືອງທີ່ຊົ່ວຮ້າຍຂອງເມືອງໂຊໂດມແລະເມືອງໂຄໂມຣາ.
- ໃນສະບັບພະຄຳພີອັງກິດບາງສະບັບ, ກຳມະຖັນຖືກເອີ້ນວ່າ "ສານກຳມະຖັນ," ຊຶ່ງຫມາຍຄວາມວ່າ "ກ້ອນຫີນລຸກໄໝ້ຢູ່".

### ຄຳແນະນຳໃນການແປ

- ການແປຄຳນີ້ທີ່ເປັນໄປໄດ້ຂອງຄຳສັບນີ້ອາດປະກອບມີ, "ກ້ອນຫີນສີເຫລືອງທີ່ໄໝ້" ຫລື "ຫີນທີ່ມີສີເຫລືອງ".

## ກຳໄລ, ໄດ້ຜົນປະໂຫຍດ

### ນິຍາມ

ໂດຍທົ່ວໄປຄຳວ່າ "ກຳໄຣ" ແລະ "ໄດ້ຜົນປະໂຫຍດ" ອ້າງເຖິງການຮັບສິ່ງທີ່ດີຜ່ານທາງການກະທຳບາງຢ່າງຫລືການປະຝຶດ
ອ້າງເຖິງສິ່ງທີ່ດີທີ່ໄດ້ຮັບ ບາງສິ່ງຈະ "ໄດ້ຜົນປະໂຫຍດ"
ຕໍ່ໃຜບາງຄົນຖ້າມັນນຳສິ່ງທີ່ດີສູ່ພວກເຂົາຫລືຖ້າມັນຊ່ວຍພວກເຂົາໃຫ້ນຳສິ່ງທີ່ດີໄປໃຫ້ຄົນອື່ນ

- ສະເພາະຢ່າງຍິ່ງ ຄຳວ່າ "ກຳໄຣ" ຫລາຍເທື່ອອ້າງເຖິງເງິນທີ່ໄດ້ຮັບຈາກການເຮັດທຸລະກິດ ທຸລະກິດນັ້ນ "ໄດ້ຜົນປະໂຫຍດ" ຖ້າຫາກໄດ້ຮັບເງິນຫລາຍກວ່າໃຊ້ຈ່າຍ
- ການກະທຳນັ້ນມີປະໂຫຍດຖ້າຫາກພວກເຂົານຳສິ່ງທີ່ດີໄປສູ່ຄົນທັ້ງປວງ
- 2 ຕີໂມທຽວ 3:16 ກ່າວວ່າພະວິດນະທຸກຕອນ" ມີປະໂຫຍດ" ສຳລັບການແກ້ໄຂແລະການຝຶກຄົນໃນທາງຄວາມຊອບທຳ ນີ້ໝາຍເຖິງຄຳສອນຂອງພະຄັມພີ ຊ່ວຍແລະມີປະໂຫຍດສຳລັບການສອນຄົນໃຫ້ຢູ່ໃນບ້ານພະທັຍຂອງພະເຈົ້າ

### ຄຳແນະນຳໃນການແປ

- ຂຶ້ນຢູ່ກັບສະຖານະການ, ຄຳວ່າ "ກຳໄຣ" ສາມາດແປລວ່າ "ປະໂຫຍດ" ຫລື "ຊ່ວຍ" ຫລື "ໄດ້ຮັບ"
- ຄຳວ່າ "ໄດ້ຜົນປະໂຫຍດ" ສາມາດແປວ່າ "ເປັນປະໂຫຍດ" ຫລື "ເປັນຜົນດີ" ຫລື "ຊ່ວຍ"
- "ໄດ້ກຳໄຣຈາກ" ບາງສິ່ງສາມາດແປວ່າ "ໄດ້ປະໂຫຍດຈາກ" ຫລື "ໄດ້ຮັບເງິນຈາກ" ຫລື ໄດ້ຮັບການຊ່ວຍເຫລືອຈາກ"
- ໃນທາງຂອງທຸລະກິດ "ກຳໄຣ" ສາມາດແປດ້ວຍຄຳ ຫລືປະໂຫຍກທີ່ໝາຍຄວາມວ່າ "ເງິນໄດ້ຮັບ" ຫລື"ເງິນສ່ວນທີ່ເກີນ" ຫລື "ເງິນພິເສດ"

## ກິນ

### ນິຍາມ

ຄຳວ່າ "ກິນ" ຕາມຕົວໜັງສືໝາຍເຖິງການກິນບາງຢ່າງ. ມີຄວາມໝາຍເປັນຄຳອຸປະມາຫຼາຍໆ ຢ່າງ

- ໃນພຣະຄຳພີ, ຄຳວ່າ "ກິນ" ມັກໝາຍເຖິງການທຳລາຍສິ່ງຂອງ ຫລື ປະຊາຊົນ.
- ໄຟກໍສາມາດເວົ້າໄດ້ວ່າມັນກິນສິ່ງຂອງຕ່າງໆ, ຊຶ່ງໝາຍຄວາມວ່າມັນໄດ້ທຳລາຍໂດຍການເຜົາໄໝ້.
- ພຣະເຈົ້າອະທິບາຍເປັນເໝືອນກັບ "ໄຟທີ່ເຜົາໄໝ້," ຊຶ່ງເປັນຄຳອະທິບາຍຄວາມຮ້າຍຂອງພຣະອົງຕໍ່ບາບ. ຄວາມຮ້າຍຂອງພຣະອົງເປັນເຫດໃຫ້ຄົນບາບທີ່ບໍ່ກັບໃຈຢ້ານກົວຕໍ່ການລົງໂທດ.
- ການກິນອາຫານໝາຍເຖິງການກິນແລະດື່ມບາງສິ່ງ.
- ຄຳທີ່ວ່າ, "ກິນແຜ່ນດິນ" ຄວນຈະແປວ່າ " ທຳລາຍແຜ່ນດິນ."

### ຄຳແນະນຳໃນການແປ

- ໃນບໍ່ກໍລະນີຂອງການກິນແຜ່ນດິນຫຼືປະຊາຊົນ, ຄຳນີ້ຄວນຈະແປວ່າ "ເປັນການທຳລາຍ."
- ເມື່ອໄຟໃຊ້ເວົ້າໃນການ "ກິນ" ຄວນຈະແປວ່າ "ໄໝ້" .
- ພຸ່ມໄມ້ທີ່ໄຟລຸກທີ່ໂມເຊເຫັນ " ຄືບໍ່ໄໝ້ " ທີ່ນີ້ຄວນຈະແປວ່າ,


generated on Thu Jul 10 08:45:04 2025

" ບໍ່ໄດ້ຖືກເຜົາໄມ້ " ຫຼື " ບໍ່ເຜົາໄໝ້."

- ເມື່ອເວົ້າເຖິງການກິນ, "ກິນ" ຄວນຈະແປວ່າ "ກິນ" ຫຼື "ກິນຢ່າງຝ່າວຝັ່ງ."
- ຖ້າພະລັງຂອງໃຜຖືກກິນໝາຍຄວາມວ່າພະລັງຂອງເຂົາ

ຖືກ "ໃຊ້ໄປໝົດ" ຫຼື "ຫາຍໄປ."

- ຄຳອະທິບາຍວ່າ "ພຣະເຈົ້າເປັນເໝືອນໄຟໄໝ້" ຄວນຈະແປວ່າ "ພຣະເຈົ້າເປັນເໝືອນໄຟທີ່ເຜົາໄໝ້ສິ່ງຕ່າງໆ" ຫຼື

"ພຣະເຈົ້າຮ້າຍຕໍ່ຄວາມບາບແລະຈະທຳລາຍຄົນບາບເໝືອນ ກັບໄຟ."

## ກິນການ

### ຂ້ເທັດຈິງ

ຄຳວ່າ ກິນການ
ຄືເມືອງຕອນເໜືອຂອງເຢຣິໂກແລະເປັນສະຖານທີ່ທຳອິດທີ່ຊົນຊາດອິສະຣາເອນຕັ້ງຄ້າຍຫລັງຈາກຂ້ວາມແມ່ນ້ຳຈໍແດນເພື່ອເຂ້ົາໄປໃນແຜ່ນດິນການາອານ.

- ທີ່ກິນການ,ໂຢຊວຍໄດ້ຕັ້ງຫີນສິບສອງກ້ອນທີ່ເອົາມາຈາກແມ່ນ້ຳຈໍແດນຕອນທີ່ພວກເຂົາກຳລັງຈະຂວ້າມມາ.
- ກິນການ ຄືເມືອງທີ ເອລີຢາ ແລະ ເອລີຊາ ຈາກມາໃນຂະນະທີ່ພວກເຂົາຂ້ວາມແມ່ນ້ຳຈໍແດນເມືອ ເອລີຢາ ຖືກຮັບຂຶ້ນໄປສະຫວັນ.
- ຍັງມີອີກຫລາຍສະຖານທີ ທີ່ເອີ້ນວ່າ "ກິນການ" ດ້ວຍໃນພັນທະສັນຍາເດີມ.
- ຄຳວ່າ "ກິນການ" ໝາຍເຖິງ "ຫີນວົງກົມ" ບາງທີອ້າງເຖິງສະຖານທີ່ໆ ແຫ່ນຫຼຸຊາໄດ້ຖືກສ້າງຂຶ້ນ.
- ໃນພັນທະສັນຍາເດີມ,ຊື່ນີ້ມັກຈະເກີດຂຶ້ນສະເໝີ, ຄື "ກິນການ." ນີ້ອາດບົ່ງຊີ້ວ່າມັນບໍ່ໄດ້ເປັນສະຖານທີ່ແນ່ນອນ
  ແຕ່ເປັນຄຳອະທິບາຍເຖິງສະຖານທີ ທີ່ແນ່ນອນບາງແຫ່ງຫລາຍກ່ວາ.

## ກິນຢ່າງຕະກະ

### ນິຍາມ

ຄຳວ່າ “ກິນຢ່າງຕະກະ” ໝາຍເຖິງການກິນຫລືບໍລິໂພກຢ່າງຮຸນແຮງ.

- ຄຳນີ້ໃຊ້ໃນທາງປ່ຽບທຽບ, ໂປໂລໄດ້ເຕືອນຜູ້ເຊື່ອຢ່າກິນຕະກະເຊິ່ງກັນແລະກັນ,
  ໝາຍຄວາມວ່າຈະບໍ່ໂຈມຕີຫລືທຳຮ້າຍເຊິ່ງກັນແລະກັນດ້ວຍຄຳເວົ້າຫລືການກະທຳ (ຄາລາເຕຍ 5:15 ).
- ພ້ອມກັນນັ້ນໃນແງ່ຄິດບວກ, ຄຳວ່າ “ກິນຕະກະ“ ມັກຖືກໃຊ້ກັບຄວາມໝາຍຂອງ “ທຳລາຍໝົດຊິ້ນ“
  ຄືກັບເວົ້າເຖິງປະເທດຕ່າງໆທີ່ກຳລັງຈູດເຜົາທຳລາຍອາຄານແລະຜູ້ຄົນ.
- ຄຳສັບນີ້ຍັງສາມາດຖືກແປເປັ້ນ “ການບໍລິໂພກຢ່າງສົມບູນ“ ຫລື “ທຳລາຍຢ່າງໝົດຊິ້ນ.

## ກີບຕີນສັດ, ມີກີບຕີນ, ຫລາຍກີບ

### ນິຍາມ

ຄຳນີ້ອ້າງເຖິງວັດສະດຸແຂງທີ່ຄອບຝາຕີນສ່ວນລຸ່ມຂອງສັດບາງຊະນິດເຊັ້ນ ອູດ, ງົວຄວາຍ, ກວາງ, ມ້າ, ລາ ,ໝູ , ງົວ, ແກະ ແລະແຢ້.

- ກີບຕີນສັດຊ່ວຍປ້ອງກັນຕີນເມື່ອເວລາຍ່າງ.
- ສັດບາງຊະນິດມີກີບຕີນແຍກເປັ້ນສອງກີບແລະສັດຊະນິດອື່ນມີກີບຕີນດຽວ.
- ພຣະເຈົ້າໄດ້ກ່າວກັບຊາວອິດສະຣາເອນວ່າສັດທີ່ມີສອງກີບແລະສັດຄ້ັງວເອ້ືອງຈະຖືວ່າເປັ້ນສັດທີ່ສະອາດໃນການຮັບປະທານ.
  ສິ່ງນີ້ລວມເຖິງງົວຄວາຍ, ແກະ, ກວາງ, ແລະ ງົວ.

## ກີເດໂອນ

### ຂ້ເທັດຈິງ

ກີເດໂອນ ຄືຜູ້ຊາຍອິສະຣາເອນຄົນທີ່ພຣະເຈົ້າໄດ້ຍົກຂຶ້ນໃຫ້ຊ່ວຍກູ້ຊົນຊາດອິສະຣາເອນຈາກສັດຕູຂອງພວກເຂົາ.

- ຊ່ວງເວລາທີ ກີເດໂອນ ມີຊີວິດຢູ່,ກຸ່ມຄົນທີ່ເອີ້ນວ່າ ມີດຽນ ພະຍາຍາມໂຈມຕີຊົນຊາດອິສະຣາເອນແລະທຳລາຍຜືດຜົນຂອງພວກເຂົາ
- ເຖິງແມ່ນວ່າກີເດໂອນຈະຢ້ານ,ພຣະເຈົ້າໄດ້ຊົງໃຊ້ເຂົາໃຫ້ນຳຊົນຊາດອິສະຣາເອນທີ່ຈະຕໍ່ສູ້ຄົນມີດຽນແລະປາບປາມພວກເຂົາ.


generated on Thu Jul 10 08:45:04 2025

- ກິເດໂອນເອງກໍໄດ້ເຊື່ອຟັງພຣະເຈົ້າໂດຍການທຳລາຍແທ່ນບູຊາພຣະປອມ ບາອານແລະພຣະອາເຊຣາ.
- ເຂົາບໍ່ພຽງແຕ່ນຳຄົນເຫຼົ່ານັ້ນໃນການໂຈມຕີສັດຕູຂອງພວກເຂົາ
  ແຕ່ຍັງໝູນໃຈພວກເຂົາໃຫ້ເຊື່ອຟັງພຣະເຈົ້າແລະນະມັດສະການພຣະເຈົ້າຢາເວ,ພຣະເຈົ້າຫ່ຽງແທ້ແຕ່ອົງດຽວ.

## ກິເບອາ

### ຂໍ້ເທັດຈິງ

ກິເບອາ ຄືຊື່ເມືອງທີ່ຕັ້ງຢູ່ທາງເໜືອຂອງນະຄອນເຢຣູຊາເລັມແລະທາງໃຕ້ຂອງເມືອງເບດເອນ.

- ກິເບອາ ຢູ່ໃນເຂດແດນຂອງຕະກູນເບັນຢາມິນ.
- ເປັນສະຖານທີ່ຂອງການສູ້ຮົບຄັ້ງໃຫຍ່ລະຫວ່າງຄົນເຜົ່າ ເບັນຢາມິນແລະອິສະຣາເອນ.

## ກິເບໂອນ,ຊາວກິເບໂອນ

### ຂໍ້ເທັດຈິງ

ກິເບໂອນ ຄືເມືອງທີ່ຕັ້ງຢູ່ທາງທິດຕາເວັນຕົກສ່ຽງເໜືອຂອງນະຄອນເຢຣູຊາເລັມປະມານ13 ກິໂລແມັດ.
ຄົນທີ່ອາໄສຢູ່ທີ່ເມືອງກິເບໂອນເອີ້ນວ່າຊາວກິເບໂອນ.

- ເມືອຊາວກິເບໂອນ ໄດ້ຍິນເລື່ອງທີ່ຊົນຊາດອິສະຣາເອນທຳລາຍເມືອງເຢຣິໂກແລະເມືອງອາຍ ພວກເຂົາກໍຢ້ານ.
- ດັ່ງນັ້ນຊາວກິເບໂອນຈຶ່ງມາຫາຜູ້ນຳຂອງຊົນຊາດອິສະຣາເອນທີ່ກິນການແລະແກ້ງເຮັດເປັນຄົນທີ່ມາຈາກເມືອງໄກແສນໄກ.
- ຜູ້ນຳຂອງຊົນຊາດອິສະຣາເອນຖືກຫລອກແລະເຮັດຂໍ້ຕົກລົງກັບຄົນກິເບໂອນວ່າພວກເຂົາຈະປົກປ້ອງຄົນກິເບໂອນແລະບໍ່ທຳລາຍພວກເຂົາ.

## ກິເລອາດ

### ຂໍ້ເທັດຈິງ

ກິເລອາດ ຄືຊື່ຂອງພູເຂົາໃນດິນແດນຕາເວັນອອກຂອງແມ່ນ້ຳຈໍແດນ,ທີ່ເຜົ່າກາດ,ຣຸເບນ,ແລະມານາເຊຂອງຊົນຊາດອິສະຣາເອນຢູ່.

- ບໍລິເວນແຫ່ງນີ້ໄດ້ຖືກອ້າງເຖິງດ້ວຍວ່າ "ເນີນພູກິເລອາດ" ຫລື "ພູເຂົາກິເລອາດ".
- "ກິເລອາດ" ຄືຊື່ຜູ້ຊາຍຫລາຍຄົນໃນພັນທະສັນຍາເດີມ ນຶ່ງໃນຜູ້ຊາຍເຫຼົ່ານີ້ນັ້ນຄືຫລານຊາຍຂອງມານາເຊ.
  ກິເລອາດອີກຄົນຄືພໍ່ຂອງເຢບທາ.

## ກຸ່ມປະຊາຊົນ" ຫລື "ກຸ່ມຄົນ,ປະຊາກອນ

### ນິຍາມ

ຄຳວ່າ "ກຸ່ມປະຊາຊົນ" ຫລື "ກຸ່ມຄົນ" ອ້າງເຖິງກຸ່ມຄົນຊຶ່ງມີພາສາແລະວັດທະນະທຳທີ່ຄືກັນ. ສ່ວນປະໂຫຍກວ່າ "ປະຊາຊົນ"
ອ້າງເຖິງເຫດການທັ້ງໝົດ ຂອງກຸ່ມຄົນໃນສະຖານທີ່ສະເພາະ ຫຼືໃນເຫດການສະເພາະ

- ການທີ່ພຣະເຈົ້າຊົງແຍກ "ປະຊາຊົນ" ສຳລັບພຣະອົງເອງ
  ໝາຍເຖິງພຣະອົງຊົງເລືອກປະຊາຊົນໂດຍສະເພາະເພື່ອເປັນຂອງພຣະອົງແລະຮັບໃຊ້ພຣະອົງ
- ໃນສະໄໝພຣະຄຳພີ
  ສະມາຊິກທີ່ຢູ່ໃນກຸ່ມຫຼືຊົນຊາດດຽວກັນມັກຈະມີບັນພະບຸລຸດດຽວກັນແລະອາໄສຢູ່ນຳກັນເປັນກຸ່ມໃນປະເທດຫລືດິນແດນໃດດິນແດນໜຶ່ງ
- ຂຶ້ນຢູ່ກັບກໍລະນີໃນປະໂຫຍກນັ້ນ ເຊັ່ນ "ປະຊາຊົນຂອງທ່ານ" ສາມາດແປວ່າ "ກຸ່ມຄົນຂອງທ່ານ" ຫຼື ຄອບຄົວຂອງທ່ານ" ຫຼື
  "ເຄືອຍາດຂອງທ່ານ"
- ຄຳວ່າ "ຫຼາຍເຊື້ອຊາດ" ຫຼາຍເທື່ອຈະໃຊ້ເພື່ອອ້າງເຖິງກຸ່ມຊົນຊາດທຸກຊາດທົ່ວໂລກ
  ບາງເທື່ອຈະອ້າງເຖິງສະເພາະເຈາะຈົງເຖິງປະຊາຊົນທີ່ບໍ່ແມ່ນຊາວອິດສະລາເອນ ຫຼືບັນດາຄົນທີ່ບໍ່ໄດ້ຮັບໃຊ້ພຣະຢາເວ ໃນພຣະຄຳພີ
  ພາສາອັງກິດບາງສະບັບນັ້ນໃຊ້ຄຳວ່າ "ຊົນຊາດ" ໃນຄວາມໝາຍນີ

### ຄຳແນະນຳໃນການແປ

- ຄຳວ່າ "ກຸ່ມຊົນ" ສາມາດແປໂດຍໃຊ້ອື່ນຊຶ່ງມີຄວາມໝາຍວ່າ "ລຸ່ມເຄືອຍາດຂະໜາດໃຫຍ່" ຫລື "ເຜົ່າພັນ ຫຼື "ຊົນກຸ່ມນ້ອຍ"


generated on Thu Jul 10 08:45:04 2025

- ປະໂຫຍກ "ປະຊາກອນຂອງເຮົາ" ສາມາດແປອີກຢ່າງໜຶ່ງວ່າ "ຍາດພີນ້ອງຂອງເຮົາ" ຫຼື "ສະຫາຍຊາວອິດສະລາເອນຂອງເຮົາ" ຫຼື "ຄອບຄົວຂອງເຮົາ" ຫຼື "ຊົນຊາດຂອງເຮົາ" ຂຶ້ນຢູ່ກັບກໍລະນີ
- ຄໍາກ່າວວ່າ " ກະທໍາໃຫ້ທ່ານທັ້ງຫຼາຍກະຈັດກະຈາຍ ໄປຢູ່ທ່າມກາງຊົນຊາດທັ້ງຫຼາຍ" ສາມາດແປໄດ້ອີກຢ່າງວ່າ "ເຮັດໃຫ້ທ່ານໄປອາໄສຢູ່ກັບກຸ່ມຊົນຕ່າງໆທີ່ແຕກຕ່າງກັນ" ຫຼື "ເຮັດໃຫ້ທ່ານຕ້ອງແຍກຈາກກັນເພື່ອໄປອາໄສຢູ່ທີ່ຕ່າງກັນທົ່ວໂລກ"
- ຄໍາວ່າ "ຫຼາຍເຊື້ອຊາດ" ຫຼື "ປະຊາຊົນ" ສາມາດແປອີກຢ່າງໜຶ່ງໄດ້ວ່າ "ປະຊາກອນໃນໂລກນີ້" ຫລື "ກຸ່ມຊົນຕ່າງໆ" ຂຶ້ນຢູ່ກັບກໍລະນີ ເໝືອນຫາ
- ປະໂຫຍກທີ່ວ່າ "ປະຊາຊົນຂອງ" ສາມາດແປອີກຢ່າງໄດ້ວ່າ "ປະຊາຊົນເຊິ່ງອາໄສຢູ່ໃນ" ຫຼື "ປະຊາຊົນເຊິ່ງສືບເຊື້ອສາຍມາຈາກ" ຫຼື "ຕະກູນຂອງ" ຂຶ້ນຢູ່ກັບວ່າຈະຕາມດ້ວຍຊື່ສະຖານທີ່ຫຼືຊື່ຄົນ
- "ບັນດາເຜົ່າພັນຂອງໂລກ" ສາມາດແປອີກຢ່າງໜຶ່ງວ່າ "ທຸກຄົນທີ່ມີຊີວິດຢູ່ໃນໂລກ" ຫຼື "ບຸກຄົນໃນໂລກ" ຫຼື "ຄົນທັ້ງປວງ"
- ປະໂຫຍກ "ຄົນ" ສາມາດແປວ່າ "ກຸ່ມປະຊາຊົນ" ຫລື "ປະຊາຊົນນັ້ນ" ຫຼື "ຊຸມຊົນຂອງປະຊາຊົນ" ຫຼື "ຕະກູນຂອງປະຊາຊົນ"

## ກູເຊ

### ຂໍ້ເທັດຈິງ

ກູເຊເປັນລູກຊາຍຄົນທໍາອິດຂອງຮາມ ເຂົາເປັນບັນພະບຸລຸດຂອງນິມໂລດ ພີນ້ອງສອງຄົນຊື່ເອຢິບແລະການາອານ.

- ໃນສະໄໝພັນທະສັນຍາເດີມ"ກູເຊ "ເປັນພື້ນທີ່ຂະໜາດໃຫຍ່ທາງຕອນໃຕ້ຂອງອິດສະຣາເອນ ເປັນໄປໄດ້ທີ່ແຜ່ນດິນນີ້ໄດ້ຮັບການຕັ້ງຊື່ຕາມຊື່ລູກຊາຍຂອງຮາມ ຄື ກູເຊ.
- ໃນຊ່ວງເວລາທີ່ແຕກຕ່າງກັນ ພື້ນທີ່ໃນສະໄໝໂບຮານຂອງ

ກູເຊ ອາດຈະຄອບຄຸມພື້ນທີ່ບາງສ່ວນຂອງປະເທດຊູດານ ອີຢິບເອທິໂອເປຍແລະອາດຈະລວມເຖິງປະເທດຊາອຸດີອາຣາເບຍໃນປະຈຸບັນ.

- ຊາຍອີກຄົນໜຶ່ງທີ່ຊື່ ກູເຊ ທີ່ຖືກກ່າວເຖິງໃນ ເພງສັນລະເສີນ.ເຂົາເປັນຄົນເບັນຢາມິນ.

## ກົດຂີ່ຂົ່ມເຫັ່ງ, ການກົດຂີ່, ຜູ້ກົດຂີ່ຂົ່ມເຫັ່ງ.

### ນິຍາມ

ຄໍາວ່າ "ກົດຂີ່ຂົ່ມເຫັ່ງ, ການກົດຂີ່, ຜູ້ກົດຂີ່ຂົ່ມເຫັ່ງ" ອ້າງເຖິງການກະທໍາ ຢ່າງຮຸນແຮງ ແລະບໍ່ສຸພາບ ຕໍ່ປະຊາຊົນ. ສ່ວນຄໍາວ່າ "ຜູ້ກົດຂີ່ຂົ່ມເຫັ່ງ" ໝາຍເຖິງບຸກຄົນ ຊຶ່ງກົດຂີ່ປະຊາຊົນ.

- ຄໍາວ່າ "ການກົດຂີ່ຂົ່ມເຫັ່ງ" ອ້າງເຖິງສະຖານະການ ຊຶ່ງຜູ້ທີ່ມີອໍານາດ ຫລາຍກວ່າ ປະຕິບັດຕໍ່ປະຊາຊົນ ຢ່າງຊົ່ວຮ້າຍ ຫລືການຈັບປະຊາຊົນ ຊຶ່ງຢູ່ໃຕ້ອໍານາດ ຫລືການປົກຄອງ.
- ຄໍາວ່າ "ຜູ້ຖືກກົດຂີ່ຂົ່ມເຫັ່ງ" ອະທິບາຍເຖິງປະຊາຊົນ ຜູ້ກໍາລັງຖືກປະຕິບັດຢ່າງຮຸນແຮງ.
- ຫລາຍເທື່ອ ຊົນຊາດສັດຕູ ແລະຜູ້ປົກຄອງ ທັ້ງຫລາຍກໍເປັນຜູ້ກົດຂີ່ຂົ່ມເຫັ່ງ ຊາວອິສະຣາເອນ.

### ຄໍາແນະນໍາໃນການແປ

- ຂຶ້ນຢູ່ກັບບໍຣິບົດ, "ກົດຂີ່ຂົ່ມເຫັ່ງ" ສາມາດແປວ່າ "ຖືກກະທໍາຢ່າງຮຸນແຮງ" ຫລື "ຖືກເຮັດໃຫ້ຕ້ອງແບກພາລະຢ່າງໜັກ" ຫລື "ເຮັດໃຫ້ຕົກຢູ່ພາຍໃຕ້ ການຖືກບັງຄັບ ດ້ວຍຄວາມທຸກຍາກ" ຫລື "ປົກຄອງດ້ວຍຄວາມໂຫດຮ້າຍ."
- ການແປຄໍາວ່າ "ການກົດຂີ່ຂົ່ມເຫັ່ງ" ສາມາດລວມເຖິງ "ການປາບປາມ ຢ່າງໜັກ ແລະການເປັນຂ້າທາດ" ຫລື "ການການຄວບຄຸມທີ່ເປັນພາລະ."
- ຄໍາເວົ້າທີ່ວ່າ "ຄົນທີ່ຖືກກົດຂີ່" "ຄົນຖືກບີບບັງຄັບ" ສາມາດແປໄດ້ອີກຢ່າງວ່າ "ປະຊາກອນທີ່ຖືກກົດຂີ່" ຫລື "ປະຊາກອນເຊິ່ງຢູ່ພາຍໃຕ້ການບີບບັງຄັບ ອັນໜັກໜ່ວງ" ຫລື "ຜູ້ຊຶ່ງຖືກກະທໍາຢ່າງໂຫດຮ້າຍ."
- ຄໍາວ່າ "ຜູ້ກົດຂີ່" ສາມາດແປອີກຢ່າງໄດ້ວ່າ "ຄົນຊຶ່ງກົດຂີ່ຂົ່ມເຫັ່ງ" ຫລື "ປະຊາຊາດທີ່ບີບບັງຄັບ ແລະປົກຄອງດ້ວຍຄວາມໂຫດຮ້າຍ" ຫລື "ຜູ້ຂົ່ມເຫັ່ງ."


generated on Thu Jul 10 08:45:04 2025

## ກົດໝາຍ, ກົດບັນຍັດຂອງໂມເຊ, ກົດບັນຍັດຂອງພຣະເຈົ້າ, ກົດບັນຍັດຂອງຊາວຢິວ

### ນິຍາມ

ຄຳທັງໝົດເຫຼົ່ານີ້ເວົ້າເຖິງຄຳສັ່ງ ແລະ ຄຳສອນຕ່າງໆທີ່ພຣະເຈົ້າມອບໄວ້ໃຫ້ແກ່ໂມເຊເພື່ອໃຫ້ຊາວອິດສະເອນເຮັດຕາມ ຄໄວ່ໆ " ກົດ " ແລະ " ພຣະບັນຍັດຂອງພຣະເຈົ້າ " ໂດຍປົກກະຕິແລ້ວຈະໃຊ້ພ້ອຍ້ອງອີງເຖິງທຸກສິ່ງມີພຣະເຈົ້າຕ້ອງການໃຫ້ປະຊາຊົນຊອງພຣະອົງເຊື່ອຟັງ.

- ຂຶ້ນຢູ່ກັບສະພາບການຄຳວ່ໆ " ກົດ " ສາມາດອ້າງອີງເຖິງສິ່ງຕໍ່ໄປນີ້.
- ພຣະບັນຍັດສິບປະການທີ່ພຣະເຈົ້າໄດ້ຂຽນເທິງແຜ່ນສິລາສຳລັບຊາວອິດສເອນ.
- ກົດບັນຍັດທັ່ງໝົດໄດ້ມອບໃຫ້ໂມເຊ.
- ພຣະຄຳຫ້ໍາເລ້ມທຳອິດຂອງປຶ້ມພຣະຄຳພີເດີມ.
- ພຣະຄຳພີພັນທະສັນສາຍາເດີມທັ່ງໝົດ ( ໄດ້ອ້າງອີງເຖິງ " ພຣະຄຳພີ "

ໃນພັນທະສັນຍາໃໝ່ອີກດ້ວຍ.)

- ຄຳສັ່ງສອນທັ່ງໝົດຂອງພຣະເຈົ້າ ແລະ ຄວາມປາດຖະໜາ.
- ວະລີ (ປະໂຫຍກ) ກົດບັນຍັດ ແລະ ຜູ້ເຜີຍຖ້ອຍຄຳຂອງພຣະເຈົ້າ ຖືກໃຊ້ໃນພັນທະສັນຍາໃໝ່ເພື່ອອ້າງອີງເຖິງພຣະຄຳພີຂອງຮີບຣູ ( ພັນທະທະສັນຍາສັນຍາເດີມ )

### ຄຳແນະນຳໃນການແປ

- ຄຳນີ້ສາມາດແປໂດຍການໃຊ້ຄຳນາມ " ກົດໝາຍທັ່ງຫຼາຍ " ນັບຕັ້ງແຕ່ພວກເຂົ້າອ້າງອີງເຖິງຄຳແນະນຳຢ່າງຫຼວງຫຼາຍ.
- ຄຳວ່ໆ " ກົດບັນຍັດຂອງໂມເຊ " ສາມາດແປວ່ໆ " ກົດບັນຍັດທີ່ພຣະເຈົ້າໄດ້ຊົງບອກໃຫ້ໂມເຊມອບໃຫ້ແກ່ຊາວອິດສເອນ. "
- ຂຶ້ນຢູ່ກັບສະພາບການ ຄຳວ່ໆ " ກົດບັນຍັດຂອງໂມເຊ " ສາມາດແປວ່ໆ " ກົດບັດຍັດທີ່ພຣະເຈົ້າບອກໃຫ້ໂມເຊ " ຫຼື " ກົກບັນຍັດຂອງພຣະເຈົ້າທີ່ໂມເຊໄດ້ຂຽນໄວ້ " ຫຼື " ກົດບັນບັດທີ່ພະເຈົ້າໄດ້ບອກໂມເຊເພື່ອມ້ອມໃຫ້ແກ່ຊາວອິດສເອນ. "
- ວິທີການແປຄຳວ່ໆ " ກົດບັນຍັດ " ຫຼື " ກົດບັນຍັດຂອງພຣະເຈົ້າ " ສາມາດລວບລວມຄຳວ່ໆ " ພະບັນຍັດຂອງພຣະເຈົ້າ " ຫຼື " ພະບັນຊາຂອງພຣະເຈົ້າ " ຫຼື " ບັນດາກົດຕ່ໆງໆທີ່ພຣະເຈົ້າປະທ່ານໃຫ້ " ຫຼື " ທຸກສິ່ງທີ່ພຣະເຈົ້າບັນຊາ " ຫຼື " ຄຳສັ່ງສອນທັ່ງໝົດຂອງພຣະເຈົ້າ. "
- ວະລີ ( ປະໂຫຍກ ) " ກົດໝາຍຂອງພຣະເຈົ້າຢາເວ " ສາມາດແປວ່ໆ " ກົດໝາຍຕ່ໆງໆຂອງພຣະເຈົ້າຢາເວ " ຫຼື " ກົດໝາຍທີ່ພຣະເຈົ້າຢາເວ " ເວົ້າໃຫ້ຟັງ " ຫຼື "ກົດໝາຍຈາກພຣະເຈົ້າຢາເວ " ຫຼື " ສິ່ງຕ່ໆງໆທີ່ພຣະເຈົ້າຢາເວຊົ່ງບັນຊາ. "

## ກົດໝາຍ, ຫຼັກການ

### ນິຍາມ

" ກົດໝາຍ " ຄືກົດຂໍ້ບັງຄັບທາງດ້ານກົດໝາຍທີ່ຖືກຂຽນເອົ່າໄວ້ແລະບັງຄັບໃຊ້ໂດຍຜູ້ມີສິດອຳນາດ. " ຫຼັກການ " ຄືແນວທາງສຳລັບການຕັດສິນໃຈ ແລະ ພຶດຕິກຳ.

- ທັ້ງ " ກົດໝາຍ " ແລະ " ຫຼັກການ " ສາມາດອ້າງອີງເຖິງກົດໂດຍທົ່ວໄປ ຫຼື ຄວາມເຊື່ອທີ່ຊີ້ນຳເຖິງພຶດຕິກຳຂອງບຸກຄົນ.
- ຄວາມໝາຍຂອງ " ກົກໝາຍ " ໃນທີ່ນີ້ແຕກຕ່າງຈາກຄວາມໝາຍຂອງຄຳວ່ໆ " ກົດບັນຍັດຂອງໂມເຊ." ບ່ອນທີ່ໝາຍເຖິງຄຳສັ່ງ ແລະ ຄຳແນະນຳທີ່ພຣະເຈົ້າໄດ້ມອບໃຫ້ກັບອິສຣາເອນ.
- ເມື່ອກົດໝາຍທົ່ວໄປຖືກອ້າງອີງເຖິງໂດຍ " ກົດໝາຍ" ສາມາດແປວ່ໆ " ຫຼັກການ " ຫຼື " ກົດໝາຍທົ່ວໄປ. "

## ກຽດ, ໃຫ້ກຽດ

### ນິຍາມ

ຄຳວ່ໆ "ກຽດ" ແລະ "ໃຫ້ກຽດ" ອ້ໆເຖິງບໆຄົນເຄົ່ໆລົບ, ນັບຖື ຍົກຍ້ອງ, ຫລືການຄາລະວະ.

- ກຽດຕິຍົດປົກກະຕິຈະໃຫ້ແກ່ບໆຄົນຜູ້ທີ່ຢູ່ໃນຖານະທີ່ສູງກ່ວ່າແລະມີຄວາມສຳຄັນ, ຢ່ໆງເຊັ່ນກະສັດຫລືພຣະເຈົ້າ.
- ພຣະເຈົ້າຊົ່ງສອນໃຫ້ຄຣິດສະຕຽນໃຫ້ກຽດຜູ້ອື່ນ, ແຕ່ບ່ໃຫ້ສະແຫວງຫ່ໆກຽດສຳລັບຕົນເອງ.
- ເດັກນ້ອຍ ຖືກສອນໃຫ້ກຽດພໍ່ແມ່ຂອງພວກເຂົ້ໆ ຊົ່ງລວມເຖິງຄວາມເຄົ່ໆລົບແລະການເຊື່ອຟັງ.


generated on Thu Jul 10 08:45:04 2025

ຄຳວ່າ "ກຽດ" ແລະ "ສີຣິ" ມັກຈະຖືກໃຊ້ນຳກັນ,
ໂດຍສະເພາະເມື່ອກ່າວເຖິງພຣະເຢຊູ .ນີ້ອາດຈະເປັນວິທີການສອງຢ່າງທີ່ແຕກຕ່າງກັນໃນການກ່າວເຖິງສິ່ງດຽວກັນ.

- ກຽດທີ່ໃຫ້ແດ່ພຣະເຈົ້າລວມເຖິງການຂອບຄຸນ ແລະສັນລະເສີນພຣະອົງ,
  ແລະສະແດງຄວາມເຄົາລົບຕໍ່ພຣະອົງໂດຍການເຊື່ອຟັງພຣະອົງ
  ແລະໃຊ້ຊີວິດໃນທາງທີ່ສະແດງໃຫ້ເຫັນວ່າພຣະອົງຊົງຍິ່ງໃຫຍ່ພຽງໃດ.

**ຄຳແນະນຳໃນການແປ**

- ວິທີອື່ນທີ່ຈະແປ "ກຽດ" ລວມເຖິງ, "ເຄົາລົບ" ຫລື "ການຍົກຍ້ອງ" ຫລື "ນັບຖືຢ່າງສູງ."
- ຄຳວ່າ "ໃຫ້ກຽດ" ສາມາດແປວ່າ "ສະແດງຄວາມເຄົາລົບພິເສດແກ່" ຫລື "ເຮັດໃຫ້ໄດ້ຮັບການສັນເລະເສີນ" ຫລື "ສະແດງຄວາມນັບຖືຢ່າງສູງສຳລັບ" ຫລື "ໃຫ້ຄວາມສຳຄັນຢ່າງສູງ."

## ກ່າວຫາ, ຂ້ຫາ, ຜູ້ກ່າວຫາ

**ນິຍາມ**

ຄຳວ່າ "ກ່າວຫາ" ແລະ "ຂ້ຫາ" ໝາຍເຖິງການກ່າວໂທດຄົນອື່ນໃນການເຮັດສິ່ງຜິດ. ບຸກຄົນທີ່ກ່າວຫາຄົນອື່ນຄື "ຜູ້ກ່າວຫາ."

- ການກ່າວຫາບໍ່ຖືກ ຄືການກ່າວຫາບາງຄົນໂດຍບໍ່ເປັນຄວາມຈິງ, ເຊັ່ນເວລາທີ່ພຣະເຢຊູຖືກກ່າວຫາແບບຜິດ
  ວ່າໄດ້ກະທຳຄວາມຜິດໂດຍພວກຜູ້ນຳຄົນຍິວ.
- ໃນປຶ້ມພຣະຄັມພີ ພຣະນິມິດຂອງພັນທະສັນຍາໃໝ່, ຊາຕານຖືກເອີ້ນວ່າ "ຜູ້ກ່າວຫາ."

## ກ່ຽວກັບກະສັດ, ກ່ຽວກັບຣາດຊະວົງ

**ນິຍາມ**

ຄຳວ່າ "ກ່ຽວກັບກະສັດ" ອະທິບາຍເຖິງຄົນຫຼືສິ່ງຂອງທີ່ກ່ຽວຂ້ອງກັບກະສັດຫຼືຣາຊີນີ.

- ຕົວຢ່າງສິ່ງຂອງທີ່ຮຽກໄດ້ວ່າ "ກ່ຽວກັບກະສັດ" ລວມໄປເຖິງເສື້ອຜ້າຂອງກະສັດ, ຣາດຊະວັງ, ບັນລັງ,ຫຼືມຸງກຸດ.
- ກະສັດຫຼືຣາຊີນີໂດຍທົ່ວໄປແລ້ວຈະຢູ່ໃນພຣະຣາຊະວັງ.
- ກະສັດຈະສວມໃສ່ເສື້ອຜ້າພິເສດ ບາງທີຈະຮຽກວ່າ "ເສື້ອຄຸມກະສັດ" ຫຼາຍໆຄັ້ງເສື້ອຄຸມຂອງກະສັດຈະເປັນສີມ່ວງ
  ຊຶ່ງຫາຍາກແລະເປັນສີຍ້ອມຊະນິດແພງ.
- ໃນພັນທະສັນຍາໃໝ່ ຜູ້ເຊື່ອໃນພຣະເຢຊູ ຖືກເອີ້ນມາ "ຣາຊະປະໂຣຫິດ" ວິທີອື່ນທີ່ຈະແປຄຳນີ້ສາມາດລວມເຖິງ "ປະໂຣຫິດ
  ຜູ້ບົວລະບັດພຣະເຈົ້າອົງກະສັດ" ຫຼືຜູ້ຖືກເອີ້ນມາໃຫ້ເປັນປະໂຣຫິດເພື່ອພຣະເຈົ້າອົງກະສັດ.
- ຄຳວ່າ "ກ່ຽວກັບກະສັດ" ສາມາດແປໄດ້ວ່າ "ກ່ຽວກັບຣາຊະວົງ" ຫຼື "ເປັນຂອງກະສັດ."

## ກ້ອນຫີນ, ແກວ່ງກ້ອນຫີນ

**ນິຍາມ**

ກ້ອນຫີນແມ່ນກ້ອນຫີນນ້ອຍໆ ຄຳວ່າ " ແກວ່ງກ້ອນຫີນ " ໝາຍເຖິງການໂຍນກ້ອນຫີນແລະກ້ອນຫີນໃຫຍ່ໃສ່ຄົນຜູ້ໜຶ່ງເພື່ອຂ້າລາວ.

- ໃນສະໄໝບູຮານການແກວ່ງກ້ອນຫີນແມ່ນວິທີການທົ່ວໄປຂອງການລົງໂທດສຳລັບການກະທຳຜິດທີ່ພວກເຂົາໄດ້ກະທຳ.
- ພຣະເຈົ້າໄດ້ສັ່ງໃຫ້ພວກຜູ້ນຳຊາວອິດສະຣາເອນແກວ່ງກ້ອນຫີນໃສ່ປະຊາຊົນຜູ້ທີ່ເຮັດບາບ ເຊັ່ນ ການຫລິ້ນຊູ້.
- ໃນພຣະຄຳພີໃໝ່ໄດ້ບອກເວລາທີ່ພຣະເຢຊູຊົງຍົກໂທດໃຫ້ຜູ້ຍິງທີ່ຖືກຈັບໃນການຫລິ້ນຊູ້ແລະໄດ້ສັ່ງໃຫ້ປະຊາຊົນຢຸດແກວ່ງກ້ອນຫີນໃສ່ຜູ້ຍິງຄົນນັ້ນ.
- ສະເຕຟາໂນເປັນບຸກຄົນທຳອິດໃນພຣະຄຳພີທີ່ຖືກຂ້າຕາຍເພາະການເປັນພະຍານເລື່ອງພຣະເຢຊູ
  ດ້ວຍການແກວ່ງກ້ອນຫີນໃສ່ໃຫ້ຕາຍ.
- ໃນເມືອງລິສະຕຣາ ອັກຄະສາວົກໂປໂລກໍຖືກແກວ່ງກ້ອນຫີນໃສ່ ແຕ່ວ່າເພິ່ນບໍ່ໄດ້ເສຍຊີວິດຍ້ອນບາດແຜຂອງລາວ.


generated on Thu Jul 10 08:45:04 2025

## ກ້າຫານ, ຢ່າງກ້າຫານ, ຄວາມກ້າຫານ

### ນິຍາມ

ຂໍ້ກໍານົດເຫຼົ່ານີ້ທັງໝົດແມ່ນເວົ້າເຖິງຄວາມກ້າຫານແລະຄວາມ ໝັ້ນໃຈໃນການເວົ້າຄວາມຈິງແລະເຮັດສິ່ງທີ່ຖືກຕ້ອງເຖິງແມ່ນ
ວ່າມັນຈະຫຍຸ້ງຍາກຫລືເປັນອັນຕະລາຍກໍ່ຕາມ.

- ບຸກຄົນທີ“ ກ້າຫານ” ບໍ່ຢ້ານທີ່ຈະເວົ້າແລະເຮັດສິ່ງທີ່ດີແລະຖືກ ຕ້ອງ, ລວມທັງການປ້ອງກັນຄົນທີ່ຖືກຂົ່ມເຫັງ. ສິ່ງນີ້ອາດຈະຖືກແປວ່າ
  "ກ້າຫານ" ຫລື "ບໍ່ມີຄວາມຢ້ານກົວ."
- ໃນພຣະຄໍາພີໃໝ່, ພວກສາວົກໄດ້ສືບຕໍ່“ ກ້າຫານ” ປະກາດກ່ຽວກັບພຣະຄຣິດໃນສະຖານທີ່ສາທາລະນະ,
  ເຖິງວ່າຈະມີອັນຕະລາຍທີ່ຈະຖືກຄຸກຫລືຖືກຂ້າ. ສິ່ງນີ້ອາດຈະຖືກແປວ່າ "ດ້ວຍຄວາມໝັ້ນໃຈ" ຫລື "ດ້ວຍຄວາມກ້າຫານທີ່ເຂັ້ມແຂງ"
  ຫລື "ຢ່າງກ້າຫານ."
- “ ຄວາມກ້າຫານ”
  ຂອງສາວົກເລີ່ມຕົ້ນໆເຫລົ່ານີ້ໃນການເວົ້າຂ່າວດີກ່ຽວກັບການຕາຍຂອງພຣະຄຣິດເທິງໄມ້ກາງແຂນສົ່ງຜົນໃຫ້ຂ່າວປະເສີດແຜ່ຂະຫຍາຍໄປທົ່ວປະເທດອິ
  ແອນ ແລະບັນດາປະເທດໃກ້ຄຽງແລະສຸດທ້າຍ, ຈົນເຖິງທົ່ວໂລກ. "ກ້າຫານ" ຍັງສາມາດຖືກແປເປັນ "ຄວາມກ້າຫານທີ່ໝັ້ນໃຈ."

## ກ້າຫານ, ທໍາດ້ວຍຄວາມກ້າຫານ

### ນິຍາມ

ຄໍາວ່າ "ກ້າຫານ" ກ່າວເຖິງການປະເຊີນໜ້າຢ່າງກ້າຫານ ຫຼື ກະທໍາສິ່ງໃດໆທີ່ຍາກ, ໜ້າຢ້ານ, ຫຼືອັນຕະລາຍ.

- ຄໍາວ່າ, "ກ້າຫານ" ໝາຍເຖິງຄົນທີ່ສະແດງຄວາມກ້າຫານ, ຜູ້ທີ່ທໍາໃນສິ່ງທີ່ຖືກຕ້ອງ ແມ່ນໃນຂະນະທີ່ຮູ້ສຶກຢ້ານ
  ຫຼືຖືກກົດດັນໃຫ້ເຊົາເຮັດ.
- ຄົນສະແດງຄວາມກ້າຫານເມື່ອປະເຊີນຄວາມເຈັບປວດທາງອາລົມຫຼືຮ່າງກາຍດ້ວຍຄວາມເຂັ້ມແຂງແລະຄວາມຜຽນ.
- ສໍານວນ "ກ້າເຂົ້າໄວ້" ໝາຍເຖິງ, "ບໍ່ຕ້ອງຢ້ານ" ຫຼື "ໝັ້ນໃຈວ່າສິ່ງຕ່າງໆຈະດີຂຶ້ນ."
- ເມື່ອໂຢຊວຍກໍາລັງຕຽມພ້ອມທີ່ຈະເຂົ້າໄປໃນແຜ່ນດິນການາອານທີ່ອັນຕະລາຍ, ໂມເຊໄດ້ແນະນໍາເຂົາໃຫ້ "ເຂັ້ມແຂງແລະກ້າຫານ."
- ຄໍາວ່າ "ກ້າຫານ" ອາດແປວ່າ "ກ້າຫານ" ຫຼື "ບໍ່ຢ້ານ" ຫຼື

"ໃຈກ້າ."

- ມີຄວາມໝາຍ, "ກ້າຫານ" ກໍ່ແປໄດ້ວ່າ, "ເຂັ້ມແຂງທາງອາລົມ" ຫຼື "ໝັ້ນໃຈ" ຫຼື "ໝັ້ນຄົງ." ທັ້ງນີ້ຂຶ້ນຢູ່ກັບສະຖານະການນັ້ນໆ
- "ເວົ້າດ້ວຍຄວາມກ້າຫານ" ອາດແປໄດ້ວ່າ, "ເວົ້າຢ່າງກ້າຫານ"

ຫຼື "ເວົ້າໂດຍບໍ່ຢ້ານ" ຫຼື "ເວົ້າຢ່າງໝັ້ນໃຈ."

## ຂວານ

### ນິຍາມ

ຂວານເປັນເຄື່ອງມືທີ່ໃຊ້ຕັດຫລືຕັດຕົ້ນໄມ້ຫລືໄມ້.

- ປົກກະຕິແລ້ວ ຂວານຈະມີດ້າມໄມ້ທີ່ຍາວແລະມີແຜ່ນມີດເຫລັກອັນໃຫຍ່ຕິດຢູ່ທີ່ສ່ວນປາຍ.
- ຖ້າໃນວັດທະນະທໍາຂອງທ່ານມີເຄື່ອງມືທີ່ຄ້າຍກັບຂວານ ຊື່ຂອງເຄື່ອງມືອັນນັ້ນກໍ່ຄວນຈະເວົ້າວ່າ" ຂວານ. "
- ໃນວິທີອື່ນໆ ທີ່ໃຊ້ແປໃນຄໍາພີກໍ່ອາດຈະລວມເຖິງຄໍາວ່າ " ເຄື່ອງທີ່ໃຊ້ຕັດຕົ້ນໄມ້ " ຫລື " ເຄື່ອງມືທີ່ເຮັດຈາກໄມ້ຜ້ອມກັບແຜ່ນມີດ "
  ຫລື " ເຄື່ອງມືທີ່ໃຊ້ຕັດໄມ້ທີ່ມີດ້າມຍາວ. "
- ມີເຫດການໜຶ່ງໃນພັນທະສັນຍາເດີມ
  ຫົວຂວານໄດ້ຫັກຝັ່ງລົງໄປໃນແມ່ນ້ໍາ,ດັ່ງນັ້ນຄໍາແປທີ່ດີທີ່ສຸດຄວນເປັນເຄື່ອງມືທີ່ມາພ້ອມລະຍາຍວ່າມີມີດທີ່ສາມາດຫລຸດອອກຈາກດ້າມບໍ່ໄດ້.

## ຂອງຂວັນ,ຂອງປະທານ

### ນິຍາມ

ຄໍາວ່າ "ຂອງຂ້ວນ" ອ້າງເຖິງຫຍັງກໍ່ໄດ້ທີ່ຄົນໜຶ່ງໄດ້ຮັບຫລືໃຫ້ແກ່ຄົນອື່ນ. ຂອງຂວັນຄືສິ່ງທີ່ໃຫ້ໂດຍບໍ່ໄດ້ຄາດຫວັງວ່າຈະໄດ້ຫຍັງກັບຄືນມາ.

- ເງິນ, ອາຫານ, ເສື້ອຜ້າ,ຫລືແມ່ນຫຍັງກໍ່ຕາມທີ່ໃຫ້ແກ່ຄົນຍາກຈົນເອີ້ນວ່າ "ຂອງຂວັນ."


generated on Thu Jul 10 08:45:04 2025

- ໃນພຣະຄໍາພີ,ຂອງຖວາຍຫລືເຄື່ອງບູຊາທີ່ໃຫ້ແກ່ພຣະເຈົ້າເອີ້ນວ່າຂອງຂວັນ.
- ຂອງຂວັນຂອງຄວາມລອດຄືບາງສິ່ງທີ່ພຣະເຈົ້າໃຫ້ເຮົາຜ່ານທາງຄວາມເຊື່ອໃນພຣະເຢຊູ.
- ໃນພັນທະສັນຍາໃຫມ່ ຄໍາວ່າ "ຂອງປະທານ"
  ກໍໃຊ້ເພື່ອບົ່ງບອກເຖິງຄວາມສາມາດພິເສດຝ່າຍວິນຍານທີ່ພຣະເຈົ້າໃຫ້ແກ່ຄຣິສະຕຽນທັ້ງຫລາຍເພື່ອຮັບໃຊ້ຜູ້ອື່ນ.

#### ຄໍາແນະນໍາການແປ

- ຄວາມຫົວໄປຂອງຄໍາວ່າ" ຂອງຂັວນ" ສາມາດແປດວ້ຍຄໍາຫລືຄໍາທີ່ໝາຍເຖິງ "ຂອງບາງສິ່ງທີ່ໄດ້ມາ".
- ໃນບໍ່ຣິບົດທີ່ໃຜຈັກຄົນນຶ່ງມີຂອງຂວັນຫລືຄວາມສາມາດພິເສດທີ່ມາຈາກພຣະເຈົ້າ "ຂອງຂວັນຈາກພຣະວິນຍານ"
  ສາມາດແປໄດ້ອີກວ່າ "ຄວາມສາມາດຝ່າຍວິນຍານ" ຫລື "ຄວາມສາມາດພິເສດຈາກພຣະວິນຍານບໍຣິສຸດ" ຫລື "
  ຄວາມສາມາດຝ່າຍວິນຍານຈິດ ທີ່ພຣະເຈົ້າປະທານໃຫ້."

## ຂະໂມຍ, ພວກຂະໂມຍ, ໂຈນ

#### ນິຍາມ

ຄໍາວ່າ"ຂະໂມຍ" ຫຼື "ພວກຂະໂມຍ"ອ້າງເຖິງຄົນທີ່ຂະໂມຍເງິນຫຼືຂະໂມຍຊັບສິນຜູ້ອື່ນ. ຄໍາວ່າ "ຂະໂມຍ"
ຫລາຍຄັ້ງອ້າງເຖິງໂຈນຜູ້ທໍາຮ້າຍຮ່າງກາຍຫຼືຄຸກຄາມປະຊາຊົນທີ່ພວກເຂົາກໍາລັງລັກ.

- ພຣະເຢຊູເຈົ້າໄດ້ຊົງເລົ່າຄໍາອຸປະມາຜູ້ຊາຍຊາວສະມາເຣຍຜູ້ໄດ້ເບິ່ງແຍງຜູ້ຊາຍທີ່ຖືກທໍາຮ້າຍໂດຍໂຈນ .ແລະທໍາຮ້າຍລາວຈົນເກືດບາດແຜ່ກ່ອນຈະຂະໂ.
- ທັ້ງໂຈນແລະພວກຂະໂມຍປຸ້ນມາລັກເອົາ, ໃນເວລາທີ່ປະຊາຊົນບໍ່ຄາດຄິດ.
  ພວກເຂົາໃຊ້ປົກປິດຄວາມມືດເພື່ອປົກປິດສິ່ງທີ່ພວກເຂົາກໍາລັງເຮັດຢູ່.
- ໃນຄວາມໝາຍປຽບທຽບ, ພຣະຄໍາພີໃໝ່ໄດ້ພັນລະນາເຖິງຊາຕານວ່າເປັນໂຈນທີ່ມາລັກ, ຂ້າ ແລະ ທໍາລາຍ.
  ນິໝາຍຄວາມວ່າແຜນການຂອງຊາຕານແມ່ນເພື່ອພະຍາຍາມເຮັດໃຫ້ປະຊາຊົນຂອງພຣະເຈົ້າຢຸດການເຊື່ອຟັງພຣະເຈົ້າ,
  ລັກຂະໂມຍສິ່ງດີໆຕ່າງໆທີ່ພຣະເຈົ້າໄດ້ວາງແຜນໄວ້ໃຫ້ພວກເຂົາປະສົບການ.
- ພຣະເຢຊູຊົງປຽບທຽບການສະເດັດກັບມາແບບກະທັນຫັນເຊັ່ນດຽວກັບໂຈນມາຂະໂມຍເງິນຈາກປະຊາຊົນ
  ເຊັ່ນດຽວກັບໂຈນມາໃນເວລາທີ່ປະຊາຊົນບໍ່ຄາດຫວັງ, ດັ່ງນັ້ນພຣະເຢຊູຈະສະເດັດມາໃນເວລາທີ່ປະຊາຊົນບໍ່ຄາດຄິດເຊັ່ນກັນ.

## ຂາດຄວາມເຊື່ອ, ການຂາດຄວາມເຊື່ອ

#### ນິຍາມ

ຄໍາວ່າ "ຄວາມເຊື່ອ" ໝາຍເຖິງການບໍ່ມີຄວາມເຊື່ອຫລືບໍ່ສັດທາ.

- ຄໍານີ້ໃຊ້ເພື່ອບັນລະຍາຍເຖິງຄົນທີ່ບໍ່ສັດທາໃນພຣະເຈົ້າ, ຊຶ່ງສາມາດເຫັນໄດ້ຈາກການກະທໍາຂອງລາວທີ່ບໍ່ມີສັດທາ.
- ຜູ້ປະກາດພຣະທັມເຢເຣມີຢາໄດ້ຕໍານິຊົນຊາດອິສະຣາເອນທີ ຂາດຄວາມເຊື່ອ ແລະບໍ່ເຊື່ອຟັງພຣະເຈົ້າ.
- ພວກເຂົາໄດ້ນະມັດສະການຮູບເຄົ່າລົບ ແລະຕິດຕາມພຣະປອມຕ່າງໆ ທີ່ບໍ່ຖືກຕ້ອງຂອງຄົນຊາດອື່ນທີ່ບໍ່ໄດ້ນະມັດສະການ
  ຫລືເຊື່ອຟັງພຣະເຈົ້າ.

#### ຄໍາແນະນໍາການແປ

- ຂຶ້ນຢູ່ກັບກໍລະນີຂອງຂ້ນັ້ນ ຄໍາວ່າ "ຂາດຄວາມເຊື່ອ" ສາມາດແປໄດ້ອີກວ່າ "ບໍ່ສັດຊື່" ຫລື "ຄວາມບໍ່ສັດທາ" ຫລື "ບໍ່ເຊື່ອຟັງ
  ພຣະເຈົ້າ" ຫລື "ບໍ່ສັດທາ."
- ຄໍາວ່າ "ການຂາດຄວາມເຊື່ອ" ສາມາດແປໄດ້ວ່າ "ຄວາມບໍ່ສັດທາ" ຫລື "ຄວາມບໍ່ສັດຊື່" ຫລື "ກະບົດຕໍ່ຕ້ານພຣະເຈົ້າ."

## ຂາຕັ້ງຕະກ່ຽງ

#### ນິຍາມ

ໃນພຣະຄໍາພີ ຄໍາວ່າ " ຂາຕັ້ງຕະກ່ຽງ " ໂດຍຫົວໄປອ້າງອີງເຖິງໂຄງສ້າງທີ່ເອົາຕະກ່ຽງວ່າງໄວ້ເພື່ອໃຫ້ສ່ອງແສງສະຫວ່າງທົ່ວຫ້ອງ.

- ຂາຕັ້ງຕະກ່ຽງໂດຍປົກກະຕິຈະຕິດກັບຕະກ່ຽງເຮັດດ້ວຍດິນໜຽວ ໄມ້ ຫຼື ເຫຼັກ ( ຢ່າງເຊັ່ນ ທອງເຫຼືອງ ເງິນ ທອງຄໍາ)
- ໃນພຣະວິຫານກຸງເຢຣູຊາເລັມມີຂາຕັ້ງຕະກ່ຽງທອງຄໍາ ເຊິ່ງມີເຈ້ຕອັນສໍາລັບຮອງຮັບຕະກ່ຽງເຈ້ຕອັນ.


generated on Thu Jul 10 08:45:04 2025

### ຄຳແນະນຳໃນການແປ

- ຄຳນີ້ສາມາດແປວ່າ " ຊັ້ນວ່າງຕະກ່ຽງ " ຫຼື " ໂຄງສ້າງສຳລັບວ່າງຕະກ່ຽງ " ຫຼື " ບ່ອນວ່າງຕະກ່ຽງ."
- ສຳລັບບ່ອນວ່າງຕະກ່ຽງໃນພຣະວິຫານ ສາມາດແປວ່າ " ຕະກ່ຽງທັງເຈັດ " ຫຼື " ແທ່ງທອງຄຳພ້ອມກັບຕະກ່ຽງທັງເຈັດ."
- ບາງທີມັນຈະຊ່ວຍໄດ້ໃນການແປຖ້າລວມເອົາພາບແທ່ງວ່າງຕະກ່ຽງແບບງ່າຍ ງ ແລະ ແທ່ງວ່າງຕະກ່ຽງເຈັດອັນຕາມຂໍ້ຄວາມໃນພຣະຄຳພີ.

## ຂ່າວດີ,ຂ່າວປະເສີດ,ພຣະກິດຕິຄຸນ

### ນິຍາມ

ຄຳວ່າ "ຂ່າວປະເສີດ" ຕາມຕົວອັກສອນໝາຍເຖິງ "ຂ່າວດີ"
ອ້າງເຖິງຂໍ້ຄວາມຫລືການປະກາດທີ່ບອກແກ່ຜູ້ທີ່ເປັນສຳລັບພວກເຂົາແລະເຮັດໃຫ້ພວກເຂົາຍິນດີ.

- ໃນພຣະຄັມພີ,ຄຳນີ້ມັກຈະໝາຍເຖິງຂໍ້ຄວາມກ່ຽວກັບຄວາມລອດຂອງພຣະເຈົ້າສຳລັບຜູ້ຄົນໂດຍທາງການຖວາຍບູຊາພຣະເຢຊູຄຣິດເທິງໄມ້ກາງແຂນ.
- ໃນຄຳພີພາສາອັງກິດສ່ວນໃຫຍ່ "ຂ່າວດີ" ມັກແປວ່າ "ຂ່າວປະເສີດ" ແລະໃຊ້ໃນຄຳເຊັ່ນ " ຂ່າວປະເສີດຂອງພຣະເຢຊູຄຣິດ,"

" ຂ່າວປະເສີດຂອງພຣະເຈົ້າ" ແລະ " ຂ່າວປະເສີດຂອງອານາຈັກ"

### ຄຳແນະນຳການແປ

" ວິທີຕ່າງໆໃນການແປຄຳນີ້ອາດລວມເຖິງ "ຂ່າວສານທີ່ດີ" ຫລື "ຄຳປະກາດທີ່ດີ" ຫລື "ຂ້ຄວາມແຫ່ງຄວາມລອດຂອງພຣະເຈົ້າ" ຫລື "ສິ່ງທີ່ພຣະເຈົ້າສອນກ່ຽວກັບພຣະເຢຊູ."

- ຂຶ້ນຢູ່ກັບບໍຣິບົດ,ວິທີການແປຄຳທີ່ວ່າ "ຂ່າວດີຂອງ" ຫລື "ສາມາດລວມເຖິງຂ່າວດີ/ຂ່າວສານກ່ຽວກັບ" ຫລື "ຂ່າວສານທີ່ດີໆຈາກ" ຫລື" ສິ່ງດີໆທີ່ພຣະເຈົ້າຊົງບອກເຮົາກ່ຽວກັບການຊ່ວຍເຫລືອມະນຸດ."

## ຂີ້ສັດ ຝຸ່ນຄອກ

### ນິຍາມ

ຄຳວ່າ "ຂີ້ສັດ" ກ່າວເຖິງເສດຂອງເສຍ ທີ່ແຂງຂອງມະນຸດຫລື ສັດ ແລະເອີ້ນອີກຢ່າງຫນຶ່ງ ວ່າ ຂີ້ຫລືສິ່ງເສດເຫລືອ ເມື່ອໃຊ້ເປັນຝຸ່ນ ເພື່ອເພີ່ມຄຸນຄ່າ ໃຫ້ກັບດິນ ເອີ້ນວ່າ "ຝຸ່ນຄອກ"

- ຄຳສັບເຫລົ່ານີ້ ສາມາດໃຊ້ໃນທຳນອງ ປຽບທຽບ ເພື່ອອ້າງເຖິງສິ່ງ ທີ່ບໍ່ມີມູນຄ່າ ຫລື ບໍ່ສຳຄັນ.

ຂີ້ສັດແຫ້ງ ໃຊ້ເປັນເຊື້ອໄຟ.

- ຄຳກ່າວວ່າ "ເຫມືອນຂອງເສດທີ່ເອົາດິນປົກໄວ້"ອາດແປໄດ້ວ່າ

" ກະຈັດກະຈາຍ ໄປເຫມືອນຂີ້ສັດ ທີ່ບໍ່ມີຄ່າ ຢູ່ເທິງພື້ນດິນ"

- "ສິ່ງເສດເຫລືອ"ໃນກຳແພງທາງຕອນໃຕ້ຂອງກຸງເຢຣູຊາເລັ້ມ

ຫນ້າຈະເປັນປະຕູ ທີ່ນຳສິ່ງເສດເຫລືອ ແລະຂອງເຫຼືອ ຖິ້ມອອກຈາກເມືອງ.

## ຂຸມ

### ນິຍາມ

ຂຸມ,ບໍ່ຄືຂຸມເລິກທີ່ຂຸດໃນດິນ

- ຄົນຂຸດຂຸມໂດຍມີວັດຖຸປະສົງເພື່ອດັກສັດປ່າຫລືຂຸດຫານ້ຳ
- ຂຸມຍັ່ງສາມາດໃຊ້ເປັນສະຖານຊົ່ວຄາວໃນການຂັ້ງນັກໂທດໄດ້
- ບາງເທື່ອຄຳວ່າ "ຂຸມ" ອ້າງເຖິງຂຸມຝັ່ງສົບຫຼືນາລິກບາງເທື່ອອາດໝາຍເຖິງ "ຫຼຸບເຫວເລິກ"
- ຂຸມທີ່ເລິກຫລາຍໆ ຍັ່ງເອີ້ນອີກວ່າເປັ້ນ"ທີ່ເກັບນ້ຳຂະໜາດໃຫຍ່"


generated on Thu Jul 10 08:45:04 2025

- ຄຳວ່າ "ຂຸມ" ຍັງໃຊ້ໃນເຊິ່ງຄຳອຸປະມາ ບາງກໍລະນີເຊັ່ນ "ຂຸມແຫ່ງການທຳລາຍ"
ທີ່ອະທິບາຍເຖິງການຖືກກັບດັກໃນສະຖານະການທີ່ຮ້າຍແຮງ ຫລືການກ່ຽວຂ້ອງກັບຄວາມບາບ ການກະທຳທີ່ເປັນການທຳລາຍ

## ຂຸ່ຍ, ເຄື່ອງດົນຕຣີປະເພດເປົ່າ ຫຼືຂຸ່ຍ

### ນິຍາມ

ໃນສໄໝພຣະຄັມພີ ຂຸ່ຍເປັນເຄື່ອງດົນຕຣີທີ່ທຳມາຈາກກະດູກຫຼືໂດຍການເຈາະຮູເພື່ອໃຫ້ສຽງອອກມາ.
ຂຸ່ຍຄືເຄື່ອງດົນຕຣີປະເພດເປົ່າຊະນິດໜຶ່ງ.

- ເຄື່ອງດົນຕຣີປະເພດເປົ່າເກືອບທັງໝົດມີຮ່ອງທີ່ທຳຈາກຫຍ້າໜ້າທີ່ຖືກສັ່ນສະເທືອນດ້ວຍລົມທີ່ເປົ່າອອກໄປ.
- ເຄື່ອງດົນຕຣີປະເພດເປົ່າທີ່ບໍ່ມີຮ່ອງ ມັກຈະຖືກເອີ້ນວ່າ"ຂຸ່ຍ".
- ດົນລ້ຽງແກະມັກຈະໃຊ້ຂຸ່ຍເພື່ອທຳໃຫ້ຝູງແກະຂອງພວກເຂົາສະຫງົບ.
- ເຄື່ອງດົນຕຣີປະເພດເປົ່າ ແລະຂຸ່ຍໃຊ້ເພື່ອຫຼິ້ນທັງດົນຕຣີທີ່ເສົ້າແລະດົນຕຣີທີ່ຊື່ນຊົມຍິນດີ.

## ຂໍທານ, ຄົນຂໍທານ

### ນິຍາມ

ຄຳວ່າ“ ຂໍ” ໝາຍເຖິງການຂໍບາງສິ່ງບາງຢ່າງດ່ວນ. ມັນມັກຈະ ໝາຍເຖິງການຂໍເງິນ,
ແຕ່ມັນຍັງຖືກນຳໃຊ້ຫຶ່ວໄປເພື່ອອ້າງອີງເຖິງການອ້ອນວອນເພື່ອບາງສິ່ງບາງຢ່າງ.

- ສ່ວນຫຼາຍຄົນມັກຈະອ້ອນວອນຫຼືອ້ອນວອນເມື່ອພວກເຂົາຕ້ອງການບາງສິ່ງບາງຢ່າງ, ແຕ່ບໍ່ຮູ້ວ່າຄົນອື່ນຈະໃຫ້ສິ່ງທີ່ພວກເຂົາຂໍ.
- "ຄົນຂໍທານ" ແມ່ນຄົນທີ່ນັ່ງຫລືຢືນຢູ່ຂ່ອນສາທາລະນະເປັນປະ ຈຳເພື່ອຂໍເງິນ.
- ອີງຕາມສະພາບການ, ຄຳສັບນີ້ອາດຈະຖືກແປເປັນ, "ຮ້ອງຂໍ" ຫລື "ຮ້ອງຂໍດ່ວນ" ຫລື "ຮຽກຮ້ອງເງິນ" ຫລື "ຂໍເງິນເປັນປະ ຈຳ".

## ຂໍຮ້ອງ , ຄຳຂໍຮ້ອງ , ວິງວອນ

### ນິຍາມ

ຄຳວ່າ "ຂໍຮ້ອງ" ແລະ"ຄຳຂໍຮ້ອງ"ໝາຍເຖິງການຂໍໃຜຈັກຄົນໃຫ້ເຮັດບາງສິ່ງຢ່າງເລັ່ງດ່ວນ ການ "ວິງວອນ" ເປັນການຂໍເລັ່ງດ່ວນ.

- ຄຳຂໍຮ້ອງຫລາຍເທື່ອມັກສະແດງວ່າບຸກຄົນນັ້ນຮູ້ສຶກມີຄວາມຈຳເປັນຫລາຍຫລືປາດຖະໜາຄວາມຊ່ວຍເຫລືອຢ່າງຫລາຍ.
- ຄົນສາມາດຂໍຮ້ອງຫລືວິງວອນເລັ່ງດ່ວນຕໍ່ພຣະເຈົ້າເພື່ອພຣະເມດຕາຫລືໃຫ້ພຣະອົງປະທານບາງຢ່າງໃຫ້ແກ່ຕົນເອງຫລືຄົນອື່ນ.
- ວິທີອື່ນໃນການແປຄຳນີ້ອາດລວມເຖິງຄຳວ່າ "ຂໍຮ້ອງ" ຫລື "ອ້ອນວອນ"ຫລື"ຂໍຢ່າງເລັ່ງດ່ວນ."
- ຄຳວ່າ"ວິງວອນ"ສາມາດແປໄດ້ອີກວ່າ"ຄຳຂໍເລັ່ງດ່ວນ"ຫລື"ການກະຕຸ້ນຢ່າງແຮງ."
- ກວດສອບໃຫ້ຊັດແຈ້ງວ່າໃນບໍລິບົດມີຄວາມຊັດແຈ້ງວ່າຄຳນີ້ບໍ່ໄດ້ໝາຍເຖິງການຂໍເງິນ.

## ຄຣິສຕະຈັກ

### ນິຍາມ

ໃນພັນທະສັນຍາໃຫມ່ ຄຳວ່າ "ຄຣິສຕະຈັກ" ກ່າວເຖິງກຸ່ມຜູ້ເຊື່ອໃນພຣະເຢຊູໃນຫອ້ງຖືນ
ທີ່ມາລວມກັນຢູ່ຢ່າງສະຫນ່ຳສະເໝີເພື່ອທີ່ຈະອະທິຖານ ແລະຟັງພຣະຄຳຂອງພຣະເຈົ້າ ຄຳວ່າ "ຄຣິສຕະຈັກ"
ມັກຈະຫມາຍເຖິງຄຣິສຕຽນທຸກຄົນ.

- ຄຳນີ້ກ່າວຕາມຕົວຫນັງສືວ່າ "ຖືກເອີ້ນອອກມາ"ການລວມກັນ ຫລື ຊຸມນຸມກັນຂອງປະຊາຊົນທີ່ມາລວມກັນເພື່ອເປົ້າຫມາຍສະເພາະ.
- ເມື່ອຄຳນີ້ໃຊ້ກ່າວເຖິງຜູ້ທີ່ເຊື່ອທຸກຄົນໃນທຸກທີ່ໃນພຣະກາຍຂອງພຣະຄຣິດ
ການແປພຣະຄຳພີພາສາອັງກິດບາງສະບັບໃຊ້ຫນັງສືຕົວທຳອິດເປັນຕົວໃຫຍ່("Church") ເພື່ອໃຫ້ເປັນຄວາມແຕກຕ່າງຂອງຄຳນີ
ຈາກຄຣິສຕະຈັກຫອ້ງຖືນ.
- ບັນດາຜູ້ເຊື່ອໃນເມືອງໃດເມືອງຫນຶ່ງມັກຈະປະຊຸມກັນໃນບ້ານຂອງຄົນໃດຄົນຫນຶ່ງ
ຄຣິສຕະຈັກຫອ້ງຖືນເຫົ່ລານີ້ໄດ້ຕັ້ງຊື່ຕາມເມືອງນັ້ນໆຢ່າງເຊັ່ນ "ຄຣິສຕະຈັກເອເຟໂຊ" .

ໃນພຣະຄຳພີ "ຄຣິສຕະຈັກ" ບໍ່ໄດ້ຫມາຍເຖິງອາຄານ.

%ຄຳແນະນຳໃນການແປ

- ຄຳວ່າ "ຄຣິສຕະຈັກ" ສາມາດແປໄດ້ວ່າ "ຊຸມນຸມກັນ" ຫລື "ລວມຕົວກັນ" ຫລື "ການຮ່ວມຊຸມນຸມກັນ" ຫລື "ຄົນທີ່ມາປະຊຸມກັນ" .
- ຄຳຫລື ຄຳເວົ້າທີ່ໃຊ້ແປຄຳນີ້ຄວນຈະຫມາຍເຖິງຜູ້ເຊື່ອທຸກຄົນ ບໍ່ແມ່ນພຽງກຸ່ມນ້ອຍໆ ພຽງກຸ່ມດຽວ.
- ຂໍໃຫ້ແນ່ໃຈວ່າການແປຄຳວ່າ "ຄຣິສຕະຈັກ" ບໍ່ໄດ້ຫມາຍເຖິງອາຄານ".
- ຄຳທີ່ໃຊ້ແປ "ການລວມຕົວກັນ" ໃນພັນທະສັນຍາເດີມສາມາດໃຊ້ແປຄຳນີ້ໄດ້ດວ້ຍ.
- ຂໍໃຫ້ພິຈາຣະນາໃຫ້ດີໃນການແປຄຳນີ ໃນການແປພຣະຄັມພີໃນພາສາທອ້ງຖິ່ນ ຫລື ພາສາກາງ.

## ຄຣິສຕຽນ

### ນິຍາມ

ຫລັງຈາກທີ່ພຣະເຢຊູສະເດັດກັບສູ່ສະຫ້ວນ ຄົນທົ່ວໄປໄດ້ເອີ້ນຊື"ຄຣິສຕຽນ" ທີ່ມີຄວາມຫມາຍວ່າ "ຜູ້ຕິດຕາມພຣະຄຣິດ"

- ບັນດາຜູ້ຕິດຕາມພຣະເຢຊູໄດ້ຖືກເອີ້ນວ່າ "ຄຣິສຕຽນ"ເປັນຄັ້ງທຳອິດໃນເມືອງອັນທີໂອເຂຍ.
- ຄຣິສຕຽນເປັນຜູ້ທີ່ສັດທາວ່າພຣະເຢຊູຊົ່ງເປັນພຣະບຸດຂອງພຣະເຈົ້າແລະຜູ້ທີ່ວາງໃຈໃນພຣະເຢຊູທີ່ຈະຊ່ວຍເຂົາໃຫ້ລອດຈາກບາບທັ້ງປວງຂອງເຂົາ.
- ໃນສະໄຫມປະຈຸບັນນີ ຫລາຍຄັ້ງທີ່ຄຳວ່າ "ຄຣິສຕຽນ"ໃຊ້ສຳຫລັບຄົນທີ່ລະບຸຕົວຕົນວ່າເປັນຄົນຖືສາດສະຫນາຄຣິສ ແຕ່ບໍ່ໄດ້ເປັນຜູ້ຕິດຕາມພຣະເຢຊູຈິງໆ ນີ້ບໍ່ແມ່ນຄວາມ

ຫມາຍຂອງ "ຄຣິສຕຽນ" ໃນພຣະຄຳພີ.

- ເພາະຄຳວ່າ "ຄຣິສຕຽນ " ໃນພຣະຄຳພີກ່າວເຖິງບາງຄົນທີ່ເປັນຜູ້ສັດທາຢ່າງແທ້ຈິງໃນພຣະເຢຊູ ຄຣິສຕຽນຍັງຖືກເອີ້ນວ່າ

"ຜູ້ສັດທາ"ດວ້ຍ.

### ຄຳແນະນຳໃນການແປ

- ຄຳນີ້ສາມາດແປໄດ້ວ່າ "ຜູ້ຕິດຕາມພຣະຄຣິດ" ຫລື "ຜູ້ຕິດຕາມຂອງພຣະຄຣິດ" ຫລືບາງທີກໍເຫມືອນກັບ "ຄົນຂອງພຣະຄຣິດ".
- ຂໍໃຫ້ແນ່ໃຈວ່າການແປຄຳນີ້ຈະແຕກຕ່າງໄປຈາກຄຳທີ່ໃຊ້ສຳຫລັບສາວົກ ຫລືປະໂລຫິດ.
- ຂໍໃຫ້ລະມັດລະວັງໃນການແປຄຳນີ້ດວ້ຍຄຳທີ່ສາມາດກ່າວເຖິງ

ທຸກຄົນທີ່ເປັນຜູ້ສັດທາ ໃນພຣະເຢຊູ ບໍ່ແມ່ນສະເພາະກຸ່ມຄົນ.

- ຂໍພິຈາຣະນາໃຫ້ດີໃນການແປຄຳນີ້ໃນພຣະຄຳພີໃນພາສາທອ້ງຖິ່ນ ຫລື ພາສາກາງດວ້ຍ.

## ຄວາມກະຕືລືລົ້ນ, ກະຕືລືລົ້ນ

### ນິຍາມ

ຄຳວ່າ " ຄວາມກະຕືລືລົ້ນ" ແລະ" ກະຕືລືລົ້ນ" ອ້າງເຖິງການອຸທິດຕົນເພື່ອສະນັບສະໜູນບຸກຄົນຫລືແນວຄິດ.

- ຄວາມກະຕືລືລົ້ນ ມີຄວາມປາຖະນາຢ່າງແຮງກ້າແລະການກະທຳ

ຕ່າງໆ ທີ່ສົ່ງເສີມເຫດທີ່ດີ ມັກໃຊ້ຢູ່ສະເມີໃນການອະທິບາຍເຖິງຄົນທີ່ສັດທາເຊື່ອຟັງໃນພຣະເຈົ້າແລະສອນໃຫ້ຄົນອື່ນທຳເຊັ່ນນັ້ນດ້ວຍ

- ການກະຕືລືລົ້ນໝາຍເຖິງການໃສ່ຄວາມພະຍາຍາມຈິງຈັງໃນການງານບາງຢ່າງໂດຍບໍ່ເຊົາຕໍ່ຄວາມພະຍາຍາມ.
- ຄຳວ່າ " ຄວາມກະຕືລືລົ້ນຂອງອົງພຣະຜູ້ເປັນເຈົ້າ" ຫລື" ຄວາມກະຕືລືລົ້ນຂອງພຣະຢາເວ" ອ້າງເຖິງຄວາມເຂັ້ງແຂງ ການກະທຳທີ່ບໍ່ລົດລະທີ່ຈະອວຍພອນແກ່ປະຊາຊົນຂອງພຣະອົງ ຫລື ເພື່ອໃຫ້ເກີດຄວາມຊອບທຳ.

### ຄຳແນະນຳໃນການແປ

- "ການກະຕືລືລົ້ນ" ສາມາດແປວ່າ "ຈິງຂະຫຍັນຢ່າງວ່ອງໄວ" ຫລື "ພະຍາຍາມຢ່າງສູງສຸດ."
- ຄຳວ່າ "ຄວາມກະຕືລືລົ້ນ" ສາມາດແປວ່າ "ຄວາມອຸທິດຕົນທີ່ມີພະ


generated on Thu Jul 10 08:45:04 2025

ລ້ຽງ" ຫລື "ຄວາມກະຕືລືລົ້ນທີ່ຊອບທັມ."

- ວະລີວ່າ " ກະຕືລືລົ້ນສຳລັບບ້ານຂອງທ່ານ" ສາມາດແປໄດ້ວ່າ "ໃຫ້ກຽດຢ່າງຍິ່ງຕໍ່ວິຫານຂອງທ່ານ" ຫລື "ຄວາມປາຖະນາຢ່າງແຮງກ້າໃນການດູແລບ້ານຂອງທ່ານ."

## ຄວາມຄິດຈິດໃຈ

### ນິຍາມ

ຄຳວ່າ "ຄວາມຄິດຈິດໃຈ" ບົ່ງບອກເຖິງສ່ວນໜຶ່ງຂອງບຸກຄົນທີ່ຄິດສິ່ງນັ້ນ ແລະ ຕັດສິນໃຈລົງມືເຮັດ.

- ຄວາມຄິດຈິດໃຈຂອງແຕ່ລະຄົນ ແມ່ນລວມທັ້ງໝົດຂອງຄວາມຄິດ ແລະ ການໃຊ້ເຫດຜົນຂອງເຂົາຫລືລາວ.
- ການ "ມີຄວາມຄິດຈິດໃຈເໝືອນພຣະເຢຊູເຈົ້າ" ໝາຍຄວາມວ່າ ສິ່ງໃດທີ່ຈະຄິດແລະຈະກະທຳ ຕ້ອງຄືກັບສິ່ງທີ່ພຣະເຢຊູເຈົ້າຄິດແລະກະທຳ. ໝາຍຄວາມວ່າ ຍອມເຊື່ອຟັງພຣະເຈົ້າພຣະບິດາ, ເຊື່ອຟັງຄຳສັ່ງສອນຈາກພຣະເຢຊູເຈົ້າ, ຈະເຮັດໄດ້ໂດຍການນຳພາຂອງພຣະວິນຍານບໍຣິສຸດເຈົ້າ.
- "ປ່ຽນແປງຄວາມຄິດຈິດໃຈ" ໝາຍຄວາມວ່າ ບາງຄົນໄດ້ຕັດສິນໃຈຕ່າງໄປອີກຢ່າງໜຶ່ງ ຫລື ຄິດຕ່າງກັບໂຕເກົ່າຫລືລາວເຄີຍຄິດມາກ່ອນ.

### ຄຳແນະນຳໃນການແປ

- ຄຳວ່າ "ຄວາມຄິດຈິດໃຈ" ຍັງສາມາດແປໄດ້ອີກວ່າ "ຄວາມຄິດ" ຫລື "ເຫດຜົນ" ຫລື "ການຄິດ" ຫລື "ການເຂົ້າໃຈ."
- ຄຳເວົ້າທີ່ວ່າ, "ຈື່ໄວ້ໃນຄວາມຄິດຈິດໃຈ" ສາມາດແປໄດ້ວ່າ "ໃຫ້ຈື່ຈຳ" ຫລື "ໃຫ້ຄວາມສົນໃຈ" ຫລື "ໃຫ້ຮູ້ໄວ້ວ່າ."
- ຄຳເວົ້າທີ່ວ່າ, "ຈິດໃຈ, ຈິດວິນຍານ, ແລະ ຄວາມຄິດຈິດໃຈ" ສາມາດແປໄດ້ອີກວ່າ, "ສິ່ງທີ່ເຈົ້າຮູ້ສຶກ, ສິ່ງທີ່ເຈົ້າເຊື່ອ, ແລະ ສິ່ງທີ່ເຈົ້າຄິດເຖິງ."
- ຄຳເວົ້າທີ່ວ່າ "ຫາກະຄຶດໄດ້ວ່າ" ສາມາດແປໄດ້ວ່າ, "ຈື່ໄດ້ວ່າ" ຫລື "ຄິດກ່ຽວກັບ."
- ຄຳເວົ້າທີ່ວ່າ,"ປ່ຽນຄວາມຄິດແລ້ວໄປຕໍ່" ສາມາດແປໄດ້ອີກວ່າ, "ຕັດສິນໃຈບໍ່ຄືເກົ່າແລ້ວໄປຕໍ່" ຫລື "ໄດ້ຕັດສິນໃຈທັງໝົດແລ້ວ" ຫລື "ປ່ຽນຄວາມຄິດແລ້ວໄປຕໍ່."

## ຄວາມຄຽດຊັ່ງ

### ນິຍາມ

ຄວາມຄວາມຄຽດຊັ່ງເປັນຄວາມຄຽດຮ້າຍທີ່ຫຼາຍເກີນໄປບໍ່ສາມາດຄວບຄຸມໄດ້,
ເມື່ອບາງຄົນຄຽດຮ້າຍແຮງກໍໝາຍຄວາມວ່າບຸກຄົນນັ້ນກຳລັງສະແດງຄວາມຄຽດຮ້າຍໃນທີ່ເປັນອັນຕະລາຍ.

- ຄວາມຄຽດຊັ່ງເກີດຂຶ້ນເມື່ອອາລົມຄວາມຄຽດຮ້າຍເຮັດໃຫ້ບຸກຄົນສູນເສຍການຄວບຄຸມໂຕເອງ.
- ເມື່ອຖືກຄວບຄຸມດ້ວຍຄວາມຄຽດຮ້າຍ,ເຮັດໃຫ້ບຸກຄົນສູນເສຍການຄວບຄຸມໂຕເອງ.
- ຄຳວ່າ "ຄຽດຊັ່ງ"ສາມາດອ້າງເຖິງ ການເຄື່ອນໄຫວທີ່ມີພະລັງ, ຢ່າງເຊັ່ນ ພາຍຸທີ "ຮຸນແຮງ"ຫຼື ຄືນມະຫາສະມຸດທີ "ພັດໄປພັດໄປມາ."
- ຄຳວ່າ"ຊົນຊາດທີ່ຄຽດຊັ່ງ"ໝາຍເຖິງ ຄົນທັ້ງຫຼາຍທີ່ບໍ່ຊອບທັມບໍ່ເຊື່ອຟັງພຣະເຈົ້າແລະຕໍ່ຕ້ານພຣະອົງ.
- ຄຳວ່າ "ເຕັ້ມໄປດ້ວຍຄວາມຄຽດຊັ່ງ"ໝາຍເຖິງ ການມີຄວາມຮູ້ສຶກທີ່ຖ້ວມລົ້ນດ້ວຍຄວາມຄຽດຮ້າຍທີ່ຮຸນແຮງ.

## ຄວາມຊົ່ວຊ້າ

### ນິຍາມ

ຄຳວ່າ "ຄວາມຊົ່ວຊ້າ" ຄືຄຳທີ່ຄ້າຍກັນຫຼາຍກັບຄຳວ່າ "ບາບ" ແຕ່ອາດເຈາະຈົງອ້າງເຖິງການທຳຄວາມຜິດຫຼືຄວາມຊົ່ວຮ້າຍຢ່າງຫຼວງຫຼາຍ

- ຄຳວ່າ "ຄວາມຊົ່ວຊ້າ" ມີຄວາມໝາຍຕົ່ງຕົວຄືບິດບຽວຫຼືຜິດຜ້ຽນໄປ (ໃນເລື່ອງທຳບັນຍັດ) ຄຳນີ້ອ້າງເຖິງຄວາມລວງລະເມີດຢ່າງຮ້າຍແຮງ
- ຄວາມຊົ່ວຊ້າສາມາດອະທິບາຍໄດ້ວ່າເປັນການກະທຳໂດຍເຈຕະນາໂດຍກໍໃຫ້ເກີດອັນຕລາຍຕໍ່ຜູ້ອື່ນ
- ຄຳໝາຍອື່ນຂອງຄວາມຊົ່ວຊ້າລວມເຖິງ "ຄວາມຄົນປະສາດ" ແລະ"ຄວາມຊົ່ວຊ້າ"ຊຶ່ງທັ້ງສອງຄຳໃຊ້ອະທິບາຍສະພາບຄວາມບາບອັນຮ້າຍແຮງ


generated on Thu Jul 10 08:45:04 2025

### ຄຳແນະນຳການແປ

- ຄຳວ່າ "ຄວາມຊົ່ວຊ້າ" ສາມາດແປໄດ້ວ່າ "ຄວາມຊົ່ວຮ້າຍ" ຫຼື "ການກະທຳຄົນປະສາດ" ຫຼື "ການປະພຶດທີ່ອັນຕະລາຍ"
- ໜ້າຍເທື່ອ "ຄວາມຊົ່ວຊ້າ" ປາກົດກັບຂໍ້ຄວາມຄຽງກັນກັບຄຳວ່າ"ບາບ" ແລະ "ການລະເມີດ" ດັ່ງນັ້ນຈຶ່ງສຳຄັນທີ່ຈະຕ້ອງມີວິຖີຊີວິດທີ່ແຕກຕ່າງກັນໃນການແປຄຳເຫຼົ່ານີ້

## ຄວາມຍິນດີ

### ນິຍາມ

“ຄວາມຍິນດີ“ ແມ່ນສິ່ງທີ່ເຮັດໃຫ້ຜູ້ໃດຜູ້ໜຶ່ງພໍໃຈຫລືເຮັດໃຫ້ເກີດຄວາມສຸກຫລາຍ.

- ເພື່ອ “ຄວາມຍິນດີໃນ“ ບາງສິ່ງບາງຢ່າງໝາຍຄວາມວ່າ “ເພີດເພີນໃນ“ ຫລື “ມີຄວາມສຸກກັບສິ່ງນັ້ນ“
- ເມື່ອບາງສິ່ງບາງຢ່າງເປັນທີ່ພໍໃຈຫລາຍ ຫລື ພໍໃຈກັບມັນເອີ້ນວ່າ “ດີໃຈຫລາຍ“
- ຖ້າຄວາມເພິ່ງພໍໃຈຂອງຄົນເຮົາຢູ່ໃນບາງສິ່ງບາງຢ່າງນັ້ນໝາຍຄວາມວ່າລາວມັກມັນຫລາຍ.
- ສຳນວນດັ່ງກ່າວ, “ຄວາມຍິນດີຂອງຂ້ອຍແມ່ນຢູ່ໃນກົດບັນຍັດຂອງພຣະຢາເວ“ ສາມາດແປວ່າ “ກົດໝາຍຂອງພຣະຢາເວເຮັດໃຫ້ຂ້ອຍມີຄວາມສຸກຫລາຍ“ ຫລື “ຂ້ອຍຮັກທີ່ຈະເຊື່ອຟັງກົດໝາຍຂອງພຣະຢາເວ“ ຫລື “ຂ້ອຍມີຄວາມສຸກເມື່ອຂ້ອຍໄດ້ເຊື່ອຟັງກົດໝາຍຂອງພຣະຢາເວ“
- ປະໂຫຍກທີ່ວ່າ “ບໍ່ມີຄວາມຍິນດີໃນ“ ແລະ “ມີຄວາມສຸກໃນ“ ສາມາດແປວ່າ “ບໍ່ພໍໃຈເລີຍ“ ຫລື “ບໍ່ມີຄວາມສຸກເລີຍ“
- ປະໂຫຍກທີ່ວ່າ “ເພີດເພີນກັບຕົນເອງໃນ“ໝາຍຄວາມວ່າ “ລາວມີຄວາມສຸກໃນການເຮັດ“ ບາງສິ່ງບາງຢ່າງ “ ຫລື “ ລາວມີຄວາມສຸກຫລາຍຕໍ່ບາງສິ່ງບາງຢ່າງ“ຫລື ຜູ້ໃດຜູ້ໜຶ່ງ.
- ຄຳວ່າ “ຄວາມຍິນດີ“ ໝາຍເຖິງສິ່ງທີ່ບຸກຄົນໃດໜຶ່ງມີຄວາມສຸກ. ສິ່ງນີ້ສາມາດແປໄດ້ວ່າ “ຄວາມເພີດເພີນ“ ຫລື “ສິ່ງທີ່ໃຫ້ມີຄວາມສຸກ“
- ການສະແດງອອກເຊັ່ນ “ຂ້ານ້ອຍດີໃຈທີ່ຈະເຮັດຕາມບໍ່ຈ້ພຣະໄທຂອງພຣະອົງ“ ສາມາດແປໄດ້ວ່າ “ຂ້ານ້ອຍມີຄວາມສຸກກັບການເຮັດຕາມພຣະປະສົງຂອງພຣະອົງ“ຫລື“ຂ້ານ້ອຍດີໃຈຫລາຍເມື່ອຂ້ານ້ອຍເຊື່ອຟັງພຣະເຈົ້າ.“

## ຄວາມທຸກທໍລະມານ

### ນິຍາມ

ຄຳວ່າ "ຄວາມທຸກທໍລະມານ" ອ້າງເຖິງເຖິງເວລາທີ່ຍາກລຳບາກ, ຄວາມທຸກທໍລະມານ,ແລະ ຄວາມທຸກລຳບາກ.

- ພຣະຄຳພີໃໝ່ກ່າວວ່າຄຣິດສະຕຽນຈະອົດທົນຕໍ່ຊ່ວງເວລາແຫ່ງການກົດຂີ່ຂົ່ມເຫັງແລະຄວາມທຸກທໍລະມານແບບອື່ນໆ ເພາະປະຊາຊົນຫລາຍຄົນໃນໂລກນີ້ຕໍ່ຕ້ານຄຳສອນຂອງພຣະເຢຊູ.
- ພຣະຄຳພີໃຊ້ຄຳວ່າ "ຄວາມທຸກທໍລະມານທີ່ຍິ່ງໃຫຍ່" ເພື່ອອະທິບາຍໄລຍະເວລາໜຶ່ງກ່ອນທີ່ການສະເດັດມາເທື່ອທີ່ສອງຂອງພຣະເຢຊູເມື່ອພຣະຜູ້ໂລດຂອງພຣະເຈົ້າຈະຖືກເທລົງເທິງພື້ນໂລກເປັນເວລາຫລາຍ
- ຄຳວ່າ "ຄວາມທຸກທໍລະມານ" ສາມາດແປວ່າ "ຊ່ວງເວລາແຫ່ງຄວາມທຸກທໍລະມານ" ຫລື "ຄວາມທຸກທໍລະມານ" ຫລື "ບັນຫາຮ້າຍແຮງ."

## ຄວາມທຸກໂສກ, ການເປັນທຸກ

### ນິຍາມ

ຄຳວ່າ "ຄວາມທຸກໂສກ" ແລະ "ການເປັນທຸກ" ໝາຍເຖິງການສະແດງຄວາມເສົ້າສະຫລົດໃຈຢ່າງເລິກເຊິ່ງ, ໂດຍປົກກະຕິແມ່ນຕໍ່ການເສຍຊີວິດຂອງຜູ້ໃດຜູ້ໜຶ່ງ.

- ໃນຫລາຍວັດທະນະທຳ, ການເປັນທຸກປະກອບມີພຶດຕິກຳພາຍນອກສະເພາະທີ່ສະແດງໃຫ້ເຫັນຄວາມໂສກເສົ້າແລະຄວາມທຸກໃຈນີ້.
- ຊາວອິດສະລາເອນແລະກຸ່ມຄົນອື່ນໆໃນສະໄໝບູຮານໄດ້ສະແດງຄວາມເສົ້າສະຫລົດໃຈໂດຍການຮ້ອງໄຫ້ແລະສຽງຮ້ອງດັ່ງໆ. ພວກເຂົາຍັງໃສ່ເຄື່ອງນຸ່ງທີ່ຫຍາບທີ່ເຮັດດ້ວຍກະເປົ໋າປ່ານແລະໂຮຍຂີ້ເຖົ່າໃສ່ຕົວຂອງພວກເຂົາເອງ.
- ຜູ້ຮັບຈ້າງຮ້ອງໄຫ້ເສົ້າໂສກ, ປົກກະຕິເປັນຜູ້ຍິງເຂົ້າມັກຈະຮ້ອງໄຫ້ສຽງດັງແລະຮ້ອງໄຫ້ຕັ້ງແຕ່ເວລາເສຍຊີວິດຈົນເຖິງເວລາທີ່ຮ່າງກາຍຖືກວາງໄວ້ໃນອຸບໂມງ.
- ໄລຍະເວລາຂອງການເປັນທຸກຄືປົກກະຕິແມ່ນເຈັດວັນ, ແຕ່ສາມາດແກ່ຍາວເຖິງ 30 ວັນ (ຄືກັບໂມເຊແລະອາໂຣນ) ຫລືເຈັດສິບວັນ (ຄືກັບຢາໂຄບ).
- ໃນພຣະຄັມພີຍັງໃຊ້ຄຳສັບໃນທາງປຽບທຽບ, ເພື່ອເວົ້າກ່ຽວກັບ "ຄວາມທຸກໂສກ" ເພາະວ່າບາບ. ນີ ໝາຍເຖິງຄວາມຮູ້ສຶກເສົ້າສະຫລົດໃຈເພາະວ່າຄວາມບາບເຮັດໃຫ້ພຣະເຈົ້າແລະຄົນເຮົາເຈັບປວດ.


generated on Thu Jul 10 08:45:04 2025

## ຄວາມທຸກໃຈ, ເຈັບປວດສາຫັດ, ແສນລະທົມ

### ນິຍາມ

ຄຳວ່າ "ທຸກໃຈ" ນີ້ກ່າວເຖິງຄວາມເຈັບປວດຮຸນແຮງຫຼືຄວາມໂສກເສົ້າ

- ຄວາມທຸກໃຈນີ້ສາມາດໝາຍເຖິງວ່າຄວາມທຸກຝ່າກາຍຫຼືທາງອາລົມກະໄດ້
- ຫລາຍຄັ້ງຄົນທີ່ທຸກໃຈຢ່າງຫລວງຫລາຍມັກແສດງອອກທາງສີໜ້າແລະການກະທຳ.
- ຕົວຢ່າງເຊັ່ນຄົນທີ່ເຈັບປວດຫລາຍຈະກັດແຂ້ວຫຼືຮ້ອງອອກມາ
- ຄຳວ່າ "ທຸກໃຈ" ອາດແປໄດ້ອີກວ່າ "ມີອາລົມໂສກເສົ້າ" ຫຼື "ເສຍໃຈຢ່າງເລິກເຊິ່ງ" ຫຼື "ເຈັບປວດຢ່າງຫລາຍ"

## ຄວາມຜິດ,ມີຄວາມຜິດ

### ນິຍາມ

ຄຳວ່າ "ຄວາມຜິດ" ອ້າງເຖິງຂໍ້ເທັດຈິງຂອງການທຳບາບຫລືທຳຄວາມຜິດ.

- ການ "ທຳຜິດ"ໝາຍເຖິງການໄດ້ທຳຜິດທາງສິລະທັມກໍຄືການບໍ່ໄດ້ເຊື່ອພຣະເຈົ້າ.
- ສິ່ງທີ່ກົງກັນຂ້ວ້າມກັບ"ຄວາມຜິດ"ກໍຄື"ບໍຣິສຸດ".

%ຄຳແນະນຳໃນການແປ

- ບາງພາສາອາດແປວ່າ "ຄວາມຜິດ" ເປັ"ນ້ຳໜັກຂອງບາບ"ຫລື "ຄວາມຜິດບາບທີ່ນັບໄດ້".
- ການແປຄຳວ່າ "ທຳຄວາມຜິດສາມາດລວມເຖິງຄຳຫລືຄຳເວົ້າທີ່ແປວ່າ"ຜິດ"ຫລື "ທຳຫຍັງຜິດສິລະທັມ"ຫຼື "ກະທຳບາບ".

ULB ຕົວຢ່າງ: ກຳຈັດຄວາມຜິດຂອງບາບຂອງທ່ານ, ເອົາຄວາມຜິດຂອງທ່ານອອກໄປ, ການຖວາຍບູຊາຄວາມຜິດ,
ລຶງໂທດຄວາມຜິດຂອງທ່ານ,ບໍ່ມີຄວາມຜິດສຳລັບການຄາດຕະກຳຈະຕິດຕາມເຂົາ, ແບກຮັບຄວາມຜິດຂອງຕົວເອງ,
ຊຳຣະຄວາມຜິດຂອງເຂົາ, ເປັນຄວາມຜິດທີ່ໃຫຍ່ຫລວງຄວາມຜິດຂອງເຮົາຂຶ້ນໄປຍັງສະຫວັນ.

## ຄວາມຝັນ

### ນິຍາມ

ຄວາມຝັນ ຄືສິ່ງທີ່ຄົນເຫັນ ຫລືປະສົບການ ໃນຈິດໃຈຂອງພວກເຂົາ ໃນຂະນະທີ່ກຳລັງຫລັບຢູ່.

- ຄວາມຝັນ ມັກຈະເບິ່ງເໝືອນເປັນສິ່ງທີ ກຳລັງເກີດຂຶ້ນ

ຈິງໆ ແຕ່ກໍ່ບໍ່ແມ່ນ.

- ບາງຄັ້ງ ພຣະເຈົ້າ ຊົ່ງເຮັດໃຫ້ຄົນຝັນ ກ່ຽວກັບບາງສິ່ງ ເພື່ອໃຫ້ພວກເຂົາສາມາດຮຽນຮູ້ ຈາກສິ່ງນັ້ນ ພຣະອົງອາດຈະກ່າວໂດຍກົງ
  ກັບຄົນໃນຄວາມຝັນຂອງພວກເຂົາ.
- ໃນພຣະຄັມພີ ພຣະເຈົ້າ ຊົ່ງໃຫ້ຄວາມຝັນພິເສດ ແກ່ບາງຄົນ ເພື່ອບອກເລື່ອງລາວບາງຢ່າງ ແກ່ພວກເຂົາ
  ຊຶ່ງມັກເປັນເລື່ອງທີ່ຈະເກີດຂຶ້ນໃນອານາຄົດ .
- ຄວາມຝັນ ແຕກຕ່າງຈາກນິມິດ ຄວາມຝັນເກີດຂຶ້ນໃນຂະນະທີ່ຄົນຫລັບ ແຕ່ນິມິດ ມັກເກີດຂຶ້ນເມື່ອຄົນຍັງຕື່ນຕົວຢູ່.

## ຄວາມມຶນງົງ

### ນິຍາມ

ຄວາມມຶນງົງເປັນພາວະຂອງຈິດໃຈທີ່ບຸກຄົນຍັງຕື່ນຢູ່ ແຕ່ບໍ່ເຂົ້າໃຈເຖິງສິ່ງທີ່ຢູ່ອ້ອມຕົວເຂົາເພາະເຂົາກຳລັງເບິ່ງເຫັນແລະປະສົບກັບສິ່ງອື່ນ.

- ໃນພຣະຄຳພີໃໝ່,
  ຄຳນີ້ອະທິບາຍສະພາວະເໜືອທຳມະຊາດຂອງຈິດໃຈທີ່ເປໂຕແລະໂປໂລໄດ້ເກີດຂຶ້ນເມື່ອພຣະເຈົ້າກ່າວກັບພວກເຂົາໃນນິມິດ.
- ໃນແຕ່ລະກໍລະນີ ເປໂຕແລະໂປໂລຢູ່ໃນພາວະທີ່ກຳລັງອະທິຖານເມື່ອພວກເຂົາໄດ້ຮັບສະຖານະຄວາມມຶນງົງ.
- ພຣະເຈົ້າຊົ່ງເປັນຜູ້ເຮັດໃຫ້ພວກເຂົາຕ້ອງມຶນງົງ.
- ຄຳວ່າ "ມຶນງົງ" ເປັນຄຳທີ່ແຕກຕ່າງຈາກ "ນິມິດ" ຫລື "ຄວາມຝັນ" ແລະຄວນມີການແປທີ່ແຕກຕ່າງກັນ.


generated on Thu Jul 10 08:45:04 2025

- ຄຳກ່າວທີ່ວ່າ "ຕົກຢູ່ໃນຄວາມມືນງົງ" ໝາຍເຖິງ "ຕົກຢູ່ໃນສະພາບນອນຫລັບທັນທີທັນໃດ " ໃນຂະນະທີ່ຍັງຕື່ນຢູ່.

## ຄວາມຢ້ານກົວ, ຢ້ານກົວ, ຄວາມຢຳເກງພຣະຢາເວ

### ນິຍາມ

ຄຳວ່າ "ຄວາມກົວຢ້ານ" ແລະ "ຢ້ານກົວ" ໝາຍເຖິງຄວາມຮູ້ສຶກທີ່ບໍ່ໜ້າຍິນດີທີ່ຄົນຜູ້ໜຶ່ງມີ ເມື່ອເກີດອັນຕະລາຍຂຶ້ນຕໍ່ຕົນເອງຫລືຜູ້ອື່ນ.

- ຄຳວ່າ "ຄວາມກົວຢ້ານ" ສາມາດກ່າວເຖິງການໃຫ້ຄວາມເຄົາລົບນັບຖືທີ່ເລິກເຊິ່ງ ແລະການເຄົາລົບຕໍ່ຜູ້ທີ່ມີອຳນາດ.
- ຄຳວ່າ "ຄວາມຢຳເກງພຣະຢາເວ," ແລະຄຳທີ່ກ່ຽວຂ້ອງຢ່າງເຊັ່ນ "ຄວາມຢຳເກງພຣະເຈົ້າ" ແລະ "ຄວາມຢຳເກງອົງພຣະຜູ້ເປັນເຈົ້າ,"
  ກ່າວເຖິງການເຄົາລົບນັບຖືຢ່າງເລິກເຊິ່ງຕໍ່ພຣະເຈົ້າແລະການສະແດງການໃຫ້ກຽດນັ້ນໂດຍການເຊື່ອຟັງພຣະອົງ.
  ຄວາມເກງກົວນີ້ຖືກຝັກຄົນໂດຍການຮູ້ຈັກວ່າ ພຣະເຈົ້າຊົງບໍຣິສຸດແລະກຽດຊັງຄວາມບາບ.
- ພຣະຄຳພີສອນໄວ້ວ່າຜູ້ທີ່ຢຳເກງພຣະຢາເວນັ້ນຈະສະຫລາດ.

### ຄຳແນະນຳການແປ

- ຂຶ້ນຢູ່ກັບບໍຣິບົດຂອງຂໍ້ນັ້ນ, "ທີ່ຈະຢຳເກງ" ສາມາດແປໄດ້ອີກວ່າ "ທີ່ຈະເກງກົວ" ຫລື "ທີ່ຈະໃຫ້ກຽດຢ່າງເລິກເຊິ່ງ" ຫລື
  "ທີ່ຈະນົບນ້ອມ" ຫລື "ເປັນທີ່ໜ້າເກງຂາມ."
- ຄຳວ່າ "ຢ້ານກົວ" ສາມາດແປໄດ້ອີກວ່າ "ທຳໃຫ້ໜ້າຢ້ານກົວຫລາຍ" ຫລື "ທຳໃຫ້ຕົກໃຈ" ຫລື "ໜ້າຢ້ານກົວ."
- ປະໂຫຍກ, ຄວາມກົວເກງພຣະເຈົ້າຈະຕົກຢູ່ເໜືອພວກເຂົາ ສາມາດແປໄດ້ອີກວ່າ,
  "ທັນໃດນັ້ນພວກເຂົາກໍຮູ້ສຶກເຖິງຄວາມໜ້າເກງກົວແລະໃຫ້ກຽດພຣະເຈົ້າຢ່າງເລິກເຊິ່ງ" ຫລື "ທັນໃດນັ້ນ,
  ພວກເຂົາຮູ້ສຶກປະຫລາດໃຈແລະນົບນ້ອມຕໍ່ພຣະເຈົ້າຢ່າງເລິກເຊິ່ງ" ຫລື "ຈາກນັ້ນ, ພວກເຂົາກໍຮູ້ສຶກຢ້ານກົວພຣະເຈົ້າ."

## ຄວາມຢ້ານກົວ, ຢ້ານກົວ

### ນິຍາມ

ຄຳວ່າ "ຄວາມຢ້ານກົວ" ອ້າງເຖິງຄວາມຮູ້ສຶກຄຽດຢ່າງແຮງຂອງຄວາມຢ້ານແລະຢ້ານຢຳຢ່າງແຮງ.
ບຸກຄົນທີ່ກຳລັງຮູ້ສຶກເຖິງຄວາມຢ້ານກົວຈະຢູ່ໃນສະພາບທີ່ເອີ້ນວ່າ "ຢ້ານກົວ."

- ຄວາມຢ້ານກົວຈະສະເທືອນໃຈແລະເຂັ້ມຂົ້ນຫລາຍກວ່າຄວາມຢ້ານທຳມະດາ.
- ໂດຍປົກກະຕິເມື່ອບາງຄົນຢ້ານກົວ ເຂົາຈະຢູ່ໃນອາການຕົກໃຈສຸດຂີດຫລືຕົກຕະລຶງດ້ວຍ.

## ຄວາມລອດ

### ນິຍາມ

ຄຳວ່າ ”ຄວາມລອດ”ແມ່ນອ້າງເຖິງການຊ່ວຍໃຫ້ປອດໄພຫລືການໄດ້ຮັບການຊ່ວຍກູ້ຈາກສິ່ງຊົ່ວຮ້າຍແລະອັນຕະລາຍ

- ໃນພຣະຄຳພີ
  ”ຄວາມລອດ”ໂດຍທົ່ວໄປແມ່ນອ້າງເຖິງຝ່າຍວິນຍານແລະການປົດປ່ອຍຊົ່ວນິລັນດອນທີ່ພຣະເຈົ້າປະທານໃຫ້ແກ່ຄົນເຫລົ່ານັ້ນທີ່ເສຍໃຈໃນຄວາມຜິດບາ
- ໃນພຣະຄຳພີຍັງເວົ້າກ່ຽວກັບການຊົ່ງຊ່ວຍເຫລືອຂອງພຣະເຈົ້າຫລືການປົດປ່ອຍປະຊາຊົນຂອງພຣະອົງຈາກສັດຕູຫ່າງຝ່າຍເນື່ອຫນັ່ງຂອງພວກເຂົາ.

%ຄຳແນະນຳໃນການແປ

- ຄຳນີ້ສາມາດແປໂດຍໃຊ້ຄຳ ”ຊ່ວຍໃຫ້ປອດໄພ” ຫລື ”ຊ່ວຍໃຫ້ລອດພົ້ນ”ຕົວຢ່າງເຊັ່ນໃນ”
  ເມື່ອພຣະເຈົ້າໄດ້ຊົ່ງຊ່ວຍປະຊາຊົນໃຫ້ປອດໄພ”.


generated on Thu Jul 10 08:45:04 2025

## ຄວາມສະທ້ານຢ້ານກົວ, ຢ້ານກົວ

### ນິຍາມ

ຄໍາວ່າ "ຄວາມສະທ້ານຢ້ານກົວ" ໝາຍເຖິງຄວາມຮູ້ສຶກຢ້ານກົວທີ່ສຸດ. ການ“ ຢ້ານກົວ”
ຜູ້ໃດຜູ້ໜຶ່ງໝາຍຄວາມວ່າເຮັດໃຫ້ຄົນນັ້ນຮູ້ສຶກຢ້ານຫຼາຍ.

- "ຄວາມຢ້ານກົວ" (ຫຼື "ຄວາມສະທ້ານຢ້ານກົວ") ແມ່ນບາງສິ່ງບາງຢ່າງຫຼືຄົນທີ່ກໍ່ໃຫ້ເກີດຄວາມຢ້ານກົວຫລືຢ້ານກົວທີ່ຍິ່ງໃຫຍ່.
  ຕົວຢ່າງຂອງການກໍ່ການຮ້າຍອາດເປັນການໂຈມຕີກອງທັບຂອງສັດຕູ ຫລື ໄພພິບັດ ຫລື ພະຍາດທີ່ແຜ່ລາມໄປທົ່ວ,
  ເຮັດໃຫ້ມີຄົນເສຍຊີວິດ.
- ຄວາມຫນ້າຢ້ານເຫຼົ່ານີ້ສາມາດຖືກອະທິບາຍວ່າ "ເປັນຕາຢ້ານ." ຄໍາສັບນີ້ອາດຈະຖືກແປເປັນ "ການສ້າງຄວາມຢ້ານກົວ" ຫຼື
  "ການຜະລິດກໍ່ການຮ້າຍ".
- ມື້ໜຶ່ງ ການພິພາກສາຂອງພຣະເຈົ້າຈະເຮັດໃຫ້ເກີດຄວາມຢ້ານກົວໃນຄົນທີ່ບໍ່ກັບໃຈ ຜູ້ທີ່ປະຕິເສດພຣະຄຸນຂອງພຣະອົງ.
- "ຄວາມຢ້ານກົວຂອງ ຢາເວ" ສາມາດຖືກແປເປັນ, "ການມີຫນ້າຢ້ານກົວຂອງ ຢາເວ" ຫຼື "ການພິພາກສາທີ່ຫນ້າຢ້ານກົວຂອງ ຢາເວ"
  ຫຼື "ເມື່ອ ຢາເວ ເຮັດໃຫ້ຄວາມຢ້ານກົວທີ່ຍິ່ງໃຫຍ່."
- ວິທີການແປທີ່ຈະແປ "ຄວາມສະທ້ານຢ້ານກົວ" ສາມາດແປໄດ້ວ່າ "ຄວາມຢ້ານຢ່າງສຸດຂຶ້ດ" ຫຼື "ຄວາມໜ້າກົວທີ່ສຸດ".

## ຄວາມສະຫວ່າງ

### ນິຍາມ

ມີການໃຊ້ໃນການປຽບທຽບເປັນຄໍາອຸປະມາຫລາຍເທື່ອສໍາຫລັບຄໍາວ່າ " ແສງສະຫວ່າ "
ໃນພຣະຄໍາພີສ່ວນຫລາຍມັກຈະໃຊ້ເພື່ອເປັນຄໍາອຸປະມາ ປຽບທຽບກັບຄວາມຊອບທໍາ ຄວາມບໍລິສຸດ ແລະ ຄວາມຈິງ

- ພຣະເຢຊູກ່າວວ່າ " ເຮົາເປັນແສງສະຫວ່າງຂອງໂລກ "
  ເພື່ອສະແດງໃຫ້ເຫັນວ່າພຣະອົງຊົງນໍາຂ່າວສານຄວາມຈິງຂອງພຣະເຈົ້າມາຍັງໂລກນີ້ ແລະ
  ຊົງຊ່ວຍກູ້ຜູ້ຄົນຈາກຄວາມມືດຈາກຄວາມບາບຈອງພວກເຂົາ.
- ບັນດາຄິຣິດສຕຽນໄດ້ຮັບຄໍາສັ່ງໃຫ້ "ເດີນໃນຄວາມສະຫວ່າງ "
  ເຊິ່ງຫມາຍຄວາມວ່າພວກເຂົາສົມຄວນດໍາເນີນຊີວິດໃນທາງທີ່ພຣະເຈົ້າຕ້ອງການໃຫ້ພວກເຂົາດໍາເນີນເພື່ອໃຫ້ຫລີກຫນີຈາກຄວາມຊົ່ວຮ້າຍ.
- ອັກຄະສາວົກ ໂຢຮັນ ກ່າວວ່າ " ພຣະເຈົ້າຊົ່ງເປັນຄວາມສະຫວ່າງ " ແລະ ບໍ່ມີຄວາມມືດໃນພຣະອົງອີກ
- ຄວາມສະຫວ່າງ ແລະ ຄວາມມືດເປັນສິ່ງທີ່ຕົ່ງກັນຂ້າມກັນ ໃນຄວາມມືດນັ້ນຈະບໍ່ມີຄວາມສະຫວ່າງອີກເລີຍ.
- ພຣະເຢຊູກ່າວວ່າພຣະອົງເປັນ " ຄວາມສະຫວ່າງຂອງໂລກ " ແລະ
  ຜູ້ທີ່ຕິດຕາມພຣະອົງສົມຄວາມເປັນຄວາມສະຫວ່າງແທນຄວາມສະຫວ່າງຂອງໂລກ
  ໂດຍດໍາເນີນຊີວິດຢູ່ໃນທາງທີ່ເຜີດເຜີຍຢ່າງຊັດເຈນເຖິງພຣະເຈົ້າຜູ້ຊົ່ງຫຍິ່ງໃຫ່ຍ.
- " ເດີນໃນຄວາມສະຫວ່າງ " ໝາຍເຖິງການດໍາເນີນຊີວິດໃນທາງທີ່ພຣະເຈົ້າຊົ່ງພໍພະໄທ ເຮັດໃນສິ່ງທີ່ດີ ແລະ ຖືກຕ້ອງ
  ການເດີນໃນຄວາມມືດສະແດງເຖິງ ການດໍາເນີນຊີວິດໃນການທີ່ບໍ່ເຊື່ອຟັງພຣະເຈົ້າ ແລະ ເຮັດໃນສິ່ງທີ່ຊົ່ວຮ້າຍ.

### ຄໍານໍາໃນການແປ

- ການແປ ເປັນສິ່ງສໍາຄັນໃນການຮັກສາຄໍາຕາມຕົ້ວຫນັງສື " ຄວາມສະຫວ່າງ " ແລະ " ຄວາມມືດ "
  ເຊິ່ງວ່າຈະຖືກໃຊ້ປຽບທຽບກັນກໍ່ຕາມ.
- ອາດຈະຈໍາເປັນທີ່ຈະຕ້ອງອະທິບາຍການປຽບທຽບໃນເນື້ອຫາ ຕົວຢ່າງເຊັ່ນ " ດໍາເນີນຊີວິດຄືກັບລູກຂອງຄວາມສະຫວ່າງ "
  ສາມາດແປວ່າ " ດໍາເນີນຊີວິດທີ່ຊອບທໍາຢ່າງເປີດເຜີຍ ປຽບບາງຄົນທີ່ຢ່າງຢູ່ພາຍໃຕ້ແສງສະຫວ່າງຂອງດວງຕາເວັນ.
- ເພື່ອໃຫ້ແນ່ໃຈວ່າການແປຄໍາວ່າ " ແສງສະຫວ່າງ " ບໍ່ໄດ້ອ້າງອີງເຖິງວັດຖຸສິ່ງຂອງທີ່ໃຊ້ໃນຄວາມສະຫວ່າງເຊັ່ນ ຕະກຽງ.

## ຄວາມສັດຊື່ໃນພັນທະສັນຍາ, ຄວາມພັກດີຂອງພັນທະສັນຍາ, ຄວາມຮັກເມດຕາ, ຄວາມຮັກທີ່ບໍ່ຫຼົ້ມເຫຼວ.

### ນິຍາມ

ຄໍານີ້ໃຊ້ເພື່ອອະທິບາຍຄວາມມຸ່ງໝັ້ນຂອງພຣະເຈົ້າໃນການປະຕິບັດຕາມສັນຍາ ທີ່ພຣະອົງໄດ້ທໍາກັບປະຊາຊົນຂອງພຣະອົງ.

- ພຣະເຈົ້າໄດ້ຊົ່ງທໍາສັນຍາກັບຄົນອິດສະຣາເອນເປັນຂັ້ຕົ່ງລົ່ງຢ່າງເປັນທາງການທີ່ເອີ້ນວ່າ "ພັນທະສັນຍາ."
- "ຄວາມສັດຊື່ໃນພັນທະສັນຍາ" ຫຼື "ຄວາມຈົ່ງຮັກພັກດີຂອງພັນທະສັນຍາ" ຂອງພຣະເຈົ້າຢາເວ ກ່າວເຖິງຂ້ັຄວາມແທ້ຈິງ ທີ


generated on Thu Jul 10 08:45:04 2025

ວ່າ ພຣະອົງຍັງຄົງຮັກສາສັນຍາຂອງຕົນໄວ້ກັບປະຊາຊົນຂອງພຣະອົງ.

- ຄວາມສັດຊື່ຂອງພຣະເຈົ້າທີ່ຈະຮັກສາພັນທະສັນຍາຂອງພຣະອົງຄື ການສະແດງອອກເຖິງພຣະຄຸນຂອງພຣະອົງທີ່ມີຕໍ່ປະຊາຊົນຂອງພຣະອົງ.
- ຄໍາວ່າ "ຄວາມຈົງຮັກພັກດີ" ເປັນອີກຄໍາໜຶ່ງທີ່ໝາຍເຖິງ ຄວາມມຸ່ງໝັ້ນ ແລະເຊື່ອຖືໄດ້ໃນການທໍາ ແລະເວົ້າໃນສິ່ງທີ່ໄດ້ສັນຍາໄວ້ແລະທີ່ຈະເປັນປະໂຫຍດຕໍ່ຜູ້ອື່ນ.

### ຄໍາແນະນໍາໃນການແປ

- ວິທີການແປຄໍານີ ຈະຂຶ້ນຢູ່ກັບວິທີແປຄໍາວ່າ "ພັນທະສັນຍາ" ແລະ "ຄວາມສັດຊື"
- ວິທີໃນການແປຄໍານີອາດລວມເຖິງ, " ຄວາມຮັກທີ່ສັດຊື," ຫຼື

"ຄວາມພັກດີທີ່ມຸ່ງໝັ້ນຮັກ" ຫຼື "ຄວາມຮັກທີ່ໄວ້ເນື້ອເຊື່ອໃຈ."

## ຄວາມສັດຊື່ທີ່ຖືກຕ້ອງ

### ນິຍາມ

ຄໍາວ່າ "ຄວາມສັດຊື່ຖືກຕ້ອງ" ອ້າງການສັດຊື ດ້ວຍຫລັກສິນລະທໍາຈັນຍາແລະການປະພຶດ

- ການມີຄວາມສັດຊື່ຖືກຕ້ອງໝາຍຄວາມວ່າເລືອກກະທໍາສິ່ງທີ່ສັດຊື່ແລະເປັນສິ່ງຖືກຕ້ອງ ເຖິງໃນເວລາທີ່ບໍ່ມີຜູ້ໃດເຫັນ
- ບຸກຄະລິກລັກສະນະທີ່ແນ່ນອນໃນພຣະຄໍາພີ ເຊັ່ນໂຢເຊບແລະດານີເອນໄດ້ສະແດງໃຫ້ເຫັນເຖິງຄວາມສັດຊື່ຖືກຕ້ອງເມື່ອພວກເຂົາປະຕິເສດທີ່ຈະເຮັດຊົ່ວ ແຕ່ເລືອກທີ່ຈະເຊື່ອຟັງພຣະເຈົ້າ
- ໜັງສືສຸພາສິດເວົ້າວ່າການເປັນຄົນຍາກຈົນແຕ່ຄວາມສັດຊື່ທີ່ຖືກຕ້ອງກໍດີກວ່າການເປັນຄົນມັ່ງຄັ່ງແຕ່ຄົດໂກງຫຼືບໍ່ສັດຊື

### ຄໍາແນະນໍາໃນການແປ

- ຄໍາວ່າ "ມີຄວາມສັດຊື່ຖືກຕ້ອງ" ສາມາດແປໄດ້ວ່າ "ຄວາມສັດຊື" ຫຼື "ການມີສິນລະທໍາສູງ" ຫຼື "ການປະພຶດທີ່ຊື່ສັດ" ຫຼື "ການກະທໍາອັນນ່າເຊື່ອຖື ດ້ວຍທໍາທີ່ສັດຊື"

## ຄວາມສໍານຶກ

### ນິຍາມ

ຄວາມສໍານຶກເປັນສ່ວນໜຶ່ງຂອງຄວາມຄິດຂອງບຸກຄົນ ຊຶ່ງພຣເຈົ້າໃຫ້ເຂົາເຂົ້າໃຈວ່າເຂົາທໍາສິ່ງທີ່ຜິດຍາຍ.

- ພຣະເຈົ້າໄດ້ໃຫ້ຄວາມສໍານຶກແກ່ມະນຸດທີ່ຈະຊ່ວຍພວກເຂົາ ໃຫ້ຮູ້ເຖິງຄວາມແຕກຕ່າງລະຫວ່າງສິ່ງທີ່ຖືກຕ້ອງແລະສິ່ງທີ່ຜິດ.
- ບຸກຄົນທີ່ເຊື່ອຟັງພຣະເຈົ້າເວົ້າໄດ້ວ່າເຂົ້າມີຄວາມສໍານຶກ"ບໍຣິ

ສຸດ" ຫຼື "ຊັດເຈນ" ຫຼື "ສະອາດ" .

- ຖ້າບຸກຄົນມີ " ຄວາມສໍານຶກທີ່ຊັດເຈນ" ໝາຍເຖິງເຂົ້າບໍ່ໄດ້ຊ້ອນຄວາມຍາຍໃດໆ .
- ຖ້າບຸກຄົນລະເລີຍຕໍ່ຄວາມສໍານຶກຂອງຕົນແລະບໍ່ຮູ້ສຶກຜິດໃດໆຕໍ່ການທໍາຜິດ ພຣະຄໍາພີເອີ້ນສິ່ງນີ້ວ່າຄວາມສໍານຶກທີ"ຊຸ່ນມົວ" ຊຶ່ງນີ້ກໍຈະ"ກ່າວຫາວ່າ"ເປັນເໝືອນເຫຼັກຮ້ອນ ຄວາມສໍານຶກເຊັ່ນນີ້ຍັງເອີ້ນວ່າ "ເຢັນຊາ" ແລະເປັ"ມົນທິນຍາຍ" .
- ວິທີແປທີ່ໜ້າຈະເປັນໄປໄດ້ສໍາລັບຄໍານີ້ຄວນຈະລວມ"ຂໍ້ແນະນໍາສິລະທໍາພາຍໃນ" ຫຼື ຄວາມຄິດທາງດ້ານສິນລະທໍາ.

## ຄວາມສຸກ, ຄວາມເບີກບານມ່ວນຊື່ນ

### ນິຍາມ

ຄວາມສຸກແມ່ນຄວາມຮູ້ສຶກທີ່ມີຄວາມສຸກຫລືຄວາມເພິ່ງພໍໃຈຢ່າງເລິກເຊິ່ງທີ່ມາຈາກພຣະເຈົ້າ. ຄໍາສັບທີ່ກ່ຽວຂ້ອງຄໍາວ່າ, ”ເບີກບານມ່ວນຊື່ນ“ ພັນລະນາເຖິງບຸກຄົນທີ່ຮູ້ສຶກດີໃຈແລະເຕັ້ມໄປດ້ວຍຄວາມສຸກຢ່າງເລິກເຊິ່ງ.

- ບຸກຄົນໃດໜຶ່ງ ທີ່ຮູ້ສຶກມີຄວາມສຸກເມື່ອລາວມີຄວາມຮູ້ສຶກເລິກເຊິ່ງວ່າສິ່ງທີ່ລາວກໍາລັງປະສົບນັ້ນມັນດີຫລາຍ.
- ພຣະເຈົ້າເປັນຜູ້ໃຫ້ຄວາມສຸກທີ່ແທ້ຈິງແກ່ຜູ້ຄົນ.


generated on Thu Jul 10 08:45:04 2025

- ການມີຄວາມສຸກບໍ່ໄດ້ຂຶ້ນກັບສະພາບການທີ່ໜ້າຍິນດີ.
  ພຣະເຈົ້າສາມາດເຮັດໃຫ້ຜູ້ຄົນມີຄວາມສຸກໄດ້ເຖິງແມ່ນວ່າຈະມີສິ່ງທີ່ຫຍຸ້ງຍາກລຳບາກຫລາຍເກີດຂຶ້ນໃນຊີວິດຂອງເຂົາເຈົ້າ.
- ບາງເທື່ອສະຖານທີ່ກໍໄດ້ຖືກອະທິບາຍວ່າມີຄວາມສຸກ, ເຊັ່ນວ່າເຮືອນຫລືເມືອງ.
  ນີ້ໝາຍຄວາມວ່າຄົນທີ່ອາໄສຢູ່ທີ່ນັ້ນມີຄວາມເບີກບານມ່ວນຊື່ນ.

### ຄຳແນະນຳ ໃນການແປ

- ຄຳວ່າ “ຄວາມສຸກ“ ສາມາດແປໄດ້ວ່າ “ ດີໃຈ“ ຫລື “ຄວາມສຸກອັນຍິ່ງໃຫຍ່“
- ປະໂຫຍກທີ່ວ່າ, “ເບີກບານມ່ວນຊື່ນ“ ສາມາດແປເປັນ “ປິຕິຍິນດີ“ ຫລື “ດີໃຈຫລາຍ“ ຫລືດ້ວຍຄຳທີ່ມີຄວາມໝາຍວ່າ “ຈຶ່ງມີຄວາມສຸກຫລາຍໃນຄວາມດີຂອງພຣະເຈົ້າ.“
- ບຸກຄົນທີ່ມີຄວາມສຸກສາມາດອະທິບາຍວ່າເປັນຄົນທີ່ມີ “ຄວາມສຸກຫລາຍ“ ຫລື “ດີໃຈ“ ຫລື “ດີໃຈຫລາຍ.“
- ປະໂຫຍກທີ່ກ່າວວ່າ “ສັ່ງສຽງໂຮ່ຮ້ອງທີ່ມີຄວາມສຸກ“ ສາມາດແປເປັນ “ຮ້ອງໃນແບບທີ່ສະແດງໃຫ້ທ່ານຮູ້ສຶກດີໃຈຫລາຍ.
- “ເມືອງທີ່ມີຄວາມສຸກ“ ຫລື “ເຮືອນທີ່ມີຄວາມສຸກ“ ສາມາແປໄດ້ວ່າ “ເມືອງທີ່ມີຜູ້ຄົນມີຄວາມສຸກ“ ຫລື “ ເຮືອນທີ່ເຕັມໄປດ້ວຍຜູ້ຄົນທີ່ມີຄວາມສຸກ “ເມືອງທີ່ປະຊາຊົນມີຄວາມສຸກຫລາຍ.

## ຄວາມສົມບູນແບບ

### ນິຍາມ

ໃນພຣະຄຳພີນັ້ນ ຄຳວ່າ "ສົມບູນແບບ" ໝາຍເຖິງການມີຊີວິດຄຣິດສະຕຽນທີ່ເຕີບໂຕເຕັມທີ ສ່ວນການເຮັດໃຫ້ສິ່ງໃດສິ່ງໜຶ່ງສົມບູນແບບໝາຍເຖິງການເຮັດຈົນກວ່າສິ່ງນັ້ນດີໝົດ, ປາສະຈາກຂໍ້ຜິດພາດໃດໆ

- ສົມບູນແບບແລະເຕີບໂຕເຕັມທີ່ນັ້ນໝາຍເຖິງຄຣິດສະຕຽນທີ່ເຊື່ອຟັງແລະປາສະຈາກບາບ
- ຄຳວ່າ "ສົມບູນແບບ" ມີຄວາມໝາຍດຽວກັບ "ຄົບຖ້ວນ" ຫຼື "ສິ່ງສົມບູນ"
- ໃນພັນທະສັນຍາໃໝ່ ພຣະທຳຢາໂກໂບໄດ້ກ່າວໄວ້ວ່າການອົດທົນເຮັດໃຫ້ຜ່ານພົ້ນ
  ການທົດລອງຈະເຮັດໃຫ້ຜູ້ເຊື່ອນັ້ນເປັນຄົນທີ່ສົມບູນແລະເຕີບໂຕເຕັມທີ
- ເມື່ອຄຣິດສະຕຽນສຶກສາພຣະຄຳພີແລະເຊື່ອຟັງ ພວກທ່ານຈະມີຄວາມສົມບູນດ້ານຈິດວິນຍານແລະເຕີບໂຕເຕັມທີ
  ເພາະພວກທ່ານຈະເປັນເໝືອນພຣະເຢຊູຫຼາຍຂຶ້ນ

### ຄຳແນະນຳໃນການແປ

- ຄຳນີ້ສາມາດແປໄດ້ອີກວ່າ "ປາສະຈາກຕຳໜິ" ຫຼື "ປາສະຈາກຂໍ້ຜິດພາດ" ຫຼື "ບໍ່ມີຂໍ້ຜິດພາດເລີຍ"

## ຄວາມຫວັງ

### ນິຍາມ

ຄຳວ່າ "ຄວາມຫວັງ" ອ້າງເຖິງການຄາດຫວັງແລະຄວາມປາດຖະໜາຢ່າງແຮງໃຫ້ບາງສິ່ງເກີດຂຶ້ນ. ແລະຍັງສາມາດແປວ່າ ບໍ່ແນ່ນອນວ່າສິ່ງນັ້ນຈະເກີດຂຶ້ນ.

- ໃນພຣະຄຳພີ, ຄຳວ່າ "ຄວາມຫວັງ" ມີຄວາມໝາຍວ່າ "ເຊື່ອໝັ້ນໃນ," ຢ່າງເຊັ່ນ
  "ຄວາມຫວັງຂອງຂ້າພຣະເຈົ້າຢູ່ໃນອົງພຣະຜູ້ເປັນເຈົ້າ."
  ນີ້ອ້າງເຖິງການຄາດຫວັງຢ່າງແນ່ນອນວ່າຈະໄດ້ຮັບສິ່ງທີ່ພຣະເຈົ້າຊົງສັນຍາໄວ້ກັບປະຊາກອນຂອງພຣະອົງ.
- ບາງເທື່ອ ULB ໄດ້ແປຄຳວ່າ "ຄວາມຫວັງ" ເປັນ "ຄວາມໝັ້ນໃຈ," ສະເພາະຢ່າງຍິ່ງໃນພັນທະສັນຍາໃໝ່
  ໃນບໍລິບົດທີ່ອ້າງເຖິງຄວາມໝັ້ນໃຈທີ່ຈະໄດ້ຮັບສິ່ງທີ່ພຣະເຈົ້າໄດ້ຊົງສັນຍາໄວ້ກັບປະຊາຊົນຜູ້ທີ່ເຊື່ອໃນພຣະເຢຊູເປັນພຣະຜູ້ຊ່ວຍໃຫ້ລອດພົ້ນ.
- ການ "ບໍ່ມີຄວາມຫວັງ" ໝາຍເຖິງການບໍ່ມີຄວາມຄາດຫວັງວ່າສິ່ງທີ່ດີຈະເກີດຂຶ້ນ.
  ນີ້ໝາຍຄວາມວ່າມັນເປັນເລື່ອງຈິງແນ່ນອນທີ່ນັ້ນຈະບໍ່ເກີດຂຶ້ນ.

### ຄຳແນະນຳໃນການແປ

- ໃນບາງບໍລິບົດ, ຄຳວ່າ "ຫວັງ" ສາມາດແປໄດ້ວ່າ "ປາຖະໜາ" ຫລື "ຕ້ອງການ" ຫລື "ຄາດຫວັງ."
- ຄຳກ່າວ, "ບໍ່ມີຫຍັງໃຫ້ຫວັງ" ສາມາດແປໄດ້ວ່າ "ບໍ່ມີຫຍັງໃຫ້ເຊື່ອ" ຫລື "ບໍ່ມີຄວາມຄາດຫວັງໃນສິ່ງທີ່ດີຫຍັງເລີຍ"
- ການ "ບໍ່ມີຄວາມຫວັງ" ສາມາດແປໄດ້ວ່າ, "ບໍ່ມີຄວາມຄາດຫວັງໃນສິ່ງທີ່ດີຫຍັງເລີຍ" ຫລື "ບໍ່ມີຫລັກປະກັນ" ຫລື "ໝັ້ນໃຈວ່າຈະບໍ່ມີຫຍັງດີເກີດຂຶ້ນ."


generated on Thu Jul 10 08:45:04 2025

- ຄຳກ່າວ, "ຈົ່ງຕັ້ງຄວາມຫວັງຂອງທ່ານໃນ " ສາມາດແປວ່າ " ໄດ້ວາງຄວາມໝັ້ນໃຈຂອງທ່ານໃນ" ຫລື "ໄດ້ເຊື່ອໝັ້ນໃນ."
- ວະລີ "ຂ້າພະເຈົ້າພົບຄວາມຫວັງໃນພະຄຳຂອງພຣະອົງ" ສາມາດແປວ່າ, "ຂ້າພະເຈົ້າໝັ້ນໃຈວ່າພຣະຄຳຂອງພຣະອົງເປັນຄວາມຈິງ" ຫລື "ພຣະຄຳຂອງພຣະອົງຊ່ວຍຂ້າພະເຈົ້າໃຫ້ເຊື່ອໝັ້ນໃຈໃນພຣະອົງ" ຫລື "ເມື່ອຂ້າພະເຈົ້າເຊື່ອຟັງພຣະຄຳຂອງພຣະອົງ ຂ້າພະເຈົ້າແນ່ໃຈວ່າຈະໄດ້ຮັບພຣະພອນ."
- ຄຳວະລີຕ່າງໆ, ເຊັ່ນ "ຫວັງໃນ" ພຣະເຈົ້າ ສາມາດແປວ່າ, "ເຊື່ອໝັ້ນໃນພຣະເຈົ້າ" ຫລື "ຮູ້ແນ່ນອນວ່າພຣະເຈົ້າຈະກະທຳສິ່ງທີ່ພຣະອົງໄດ້ຊົງສັນຍາໄວ້" ຫລື "ແນ່ໃຈວ່າພຣະເຈົ້າຊົງສັດຊື່."

## ຄວາມອັບປະຍົດ, ໜ້າອັບປະຍົດ

### ນິຍາມ

ຄຳວ່າ "ຄວາມອັບປະຍົດ" ກ່ຽວກັບການສູນເສຍກຽດແລະຄວາມເຄົາລົບນັບຖື.

- ເມື່ອຄົນທຳສິ່ງທີ່ຜິດບາບ,ມັນທຳໃຫ້ເຂົາຢູ່ໃນສະພາບອັບປະຍົດຫຼືເສຍກຽດ.
- ຄຳວ່າ "ໜ້າອັບປະຍົດ" ໃຊ້ເພື່ອອະທິບາຍລັກສະນະການກະທຳຜິດບາບຫຼືບຸກຄົນທີ່ທຳຜິດບາບ.
- ບາງຄັ້ງຄົນທີ່ທຳສິ່ງທີ່ດີ ໄດ້ຮັບການປະຕິບັດໃນທາງທີ່ທຳໃຫ້ເຂົາຮັບຄວາມອັບປະຍົດ ຫຼືໜ້າອັບອາຍ.
- ຕົວຢ່າງເຊັ່ນເມື່ອພຣະເຢຊູຖືກປະຫານເທິງໄມ້ກາງແຂນ,ນີ້ເປັນວິທີທີ່ທຳໃຫ້ຕາຍຢ່າງໜ້າອັບປະຍົດ.ພຣະເຢຊູບໍ່ໄດ້ທຳຫຍັງຜິດທີ່ຈະໄດ້ຮັບຄວາມອັບປະຍົ
- ວິທີການແປ "ຄວາມອັບປະຍົດ" ອາດລວມເຖິງ" ຄວາມອັບອາຍ " ຫຼື "ຄວາມເສຍກຽດ".
- ວິທີການແປ "ໜ້າອັບປະຍົດ" ອາດລວມເຖິງ"ໜ້າອັບອາຍ" ຫຼື "ເສຍຊື່ສຽງ".

## ຄວາມອາຍ, ໜ້າອັບອາຍ, ອາຍ

### ນິຍາມ

ຄຳວ່າ“ ຄວາມອາຍ”
ໝາຍເຖິງຄວາມຮູ້ສຶກທີ່ເຈັບປວດທີ່ຈະເຮັດໃຫ້ຄົນເສຍເມຍ້ຍ້ອນສິ່ງທີ່ບໍ່ສົມຄວນຫລືບໍ່ເໝາະສົມທີ່ຕົນເອງຫຼືຄົນອື່ນໄດ້ເຮັດ.

- ບາງສິ່ງບາງຢ່າງທີ“ ໜ້າອັບອາຍ” ແມ່ນ“ ບໍ່ເໝາະສົມ” ຫຼື“ ໜ້າ ອັບອາຍ”.
- ຄຳວ່າ“ ໜ້າອາຍ” ອະທິບາຍວ່າຄົນເຮົາຮູ້ສຶກແນວໃດເມື່ອລາວໄດ້ເຮັດສິ່ງທີ່ໜ້າອາຍ.
- ປະໂຫຍກທີ່ວ່າ
"ເຮັດໃຫ້ອັບອາຍ"ຫມາຍຄວາມວ່າຈະເອົາຊະນະຄົນຫຼືເປີດເຜີຍຄວາມບາບຂອງພວກເຂົາເພື່ອໃຫ້ພວກເຂົາຮູ້ສຶກອັບອາຍຕົວເອງ.
- ຜູ້ເຜີຍພຣະຄຳເອຊາຢາກ່າວວ່າຜູ້ທີ່ເຮັດແລະບູຊາຮູບປັ້ນຈະຖືກອັບອາຍ.
- ພຣະເຈົ້າສາມາດນຳຄວາມອັບອາຍມາສູ່ຜູ້ທີ່ບໍ່ກັບໃຈ, ໂດຍການເປີດເຜີຍຄວາມຜິດຂອງຄົນນັ້ນແລະເຮັດໃຫ້ລາວຖືກອັບອາຍ.

## ຄວາມຮັກ

### ນິຍາມ

ການທີ່ຈະຮັກຄົນອື່ນແມ່ນການເບິ່ງແຍງຄົນນັ້ນ ແລະ ເຮັດສິ່ງທີ່ຈະເປັນປະໂຫຍດຕໍ່ລາວ. ມີຄວາມໝາຍ ທີ່ແຕກຕ່າງກັນສຳລັບ " ຄວາມຮັກ " ເຊິ່ງບາງພາສາອາດສະແດງອອກໂດຍໃຊ້ຄຳສັບຕ່າງກັນ: 1. ຄວາມຮັກທີ່ມາຈາກພຣະເຈົ້າແມ່ນສຸມໃສ່ຄວາມດີຂອງຄົນອື່ນ, ເຖິງແມ່ນວ່າມັນບໍ່ໄດ້ຮັບຜົນປະໂຫຍດແກ່ຕົວເອງ. ຄວາມຮັກແບບນີ້ສືບໃຈຄົນອື່ນ, ບໍ່ວ່າພວກເຂົາຈະເຮັດຫຍັງກໍຕາມ. ພຣະເຈົ້າເອງເປັນຄວາມຮັກແລະ ເປັນແຫຼ່ງຂອງຄວາມຮັກທີ່ແທ້ຈິງ.

- ພຣະເຍຊູສະແດງຄວາມຮັກແບບນີ້ໂດຍການເສຍສະຫຼະຊີວິດເພື່ອທີ່ຈະຊ່ວຍເຮົາໃຫ້ພົ້ນຈາກບາບ ແລະຄວາມຕາຍ. ພຣະອົງຍັງໄດ້ສອນຜູ້ຕິດຕາມຂອງພຣະອົງໃຫ້ຮັກຄົນອື່ນໂດຍເສຍສະຫຼະ.
- ເມື່ອຄົນອື່ນຮັກຄົນອື່ນດ້ວຍຄວາມຮັກແບບນີ້, ມັນກ່ຽວຂ້ອງກັບການກະທຳທີ່ສະແດງໃຫ້ເຫັນວ່າຜູ້ໃດຜູ້ ໜຶ່ງກຳລັງຄິດເຖິງສິ່ງທີ່ຈະເຮັດໃຫ້ຄົນອື່ນຈະເລີນຮຸ່ງເຮືອງ. ຄວາມຮັກແບບນີ້ໂດຍສະເພາະແມ່ນລວມທັ້ງການໃຫ້ອະໄພຄົນອື່ນ.
- ໃນ ULB, ຄຳວ່າ "ຄວາມຮັກ" ໝາຍເຖິງຄວາມຮັກແບບເສຍສະຫຼະຊະນິດນີ້, ເວັ້ນເສຍແຕ່ວ່າປຶ້ມບັນທຶກການແປໝາຍເຖິງຄວາມໝາຍທີ່ແຕກຕ່າງກັນ.

1. ອີກຄຳໜຶ່ງໃນພັນທະສັນຍາໃໝ່ໝາຍເຖິງຄວາມຮັກແບບອ້າຍນ້ອງ ຫຼື ຄວາມຮັກສຳລັບໝູ່ເພື່ອນ ຫຼື ສະມາຊິກໃນຄອບຄົວ.

- ຄຳນີ້ໝາຍເຖິງຄວາມຮັກແບບທຳມະຊາດຂອງມະນຸດລະຫວ່າງໝູ່ເພື່ອນ ຫຼື ຍາດພີ່ນ້ອງ.


generated on Thu Jul 10 08:45:04 2025

- ມັນຍັງສາມາດຖືກນໍາໃຊ້ໃນສະພາບການເຊັ່ນ "ພວກເຂົາມັກນັ່ງຢູ່ບ່ອນນັ່ງທີ່ສໍາຄັນທີ່ສຸດໃນງານລ້ຽງ". ນີ ໝາຍຄວາມວ່າພວກເຂົາ“ ມັກຫລາຍ” ຫຼື “ ປາດຖະໜາຢ່າງຍິ່ງ” ທີ່ຈະເຮັດແນວນັ້ນ.

1. ຄໍາວ່າ "ຄວາມຮັກ" ຍັງສາມາດໝາຍເຖິງຄວາມຮັກແບບໂລແມນຕິກລະຫວ່າງຊາຍແລະຍິງ. ໃນຄໍາເວົ້າທີ່ປຽບທຽບ, "ຢາໂຄບຂ້ອຍມີຄວາມຮັກ, ແຕ່ເອຊາອາມຂ້ອຍໄດ້ກຽດຊັ່ງ", ຄໍາວ່າ "ຮັກ" ໝາຍເຖິງການທີ່ພຣະເຈົ້າເລືອກຢາໂຄບໃຫ້ຢູ່ໃນຄວາມສໍາພັນແຫ່ງພັນທະສັນຍາກັບລາວ. ນີຍັງສາມາດຖືກແປເປັນ "ເລືອກ." ເຖິງແມ່ນວ່າເອຊາອາມຍັງໄດ້ຮັບພອນຈາກພຣະເຈົ້າ, ລາວບໍ່ໄດ້ຮັບສິດທິພິເສດທີ່ຈະຢູ່ໃນພັນທະສັນຍາ. ຄໍາວ່າ "ກຽດຊັ່ງ" ຖືກນໍາໃຊ້ເປັນຕົວເລກໃນນີ້ເພື່ອໝາຍຄວາມວ່າ "ຖືກປະຕິເສດ" ຫຼື "ບໍ່ໄດ້ຖືກເລືອກ."

### ຄໍາແນະນໍາໃນການແປ

- ເວັ້ນເສຍແຕ່ໄດ້ລະບຸຢ່າງອື່ນໃນປຶ້ມບັນທຶກການແປ, ຄໍາວ່າ "ຄວາມຮັກ" ໃນ ULB ໝາຍເຖິງຄວາມຮັກແບບເສຍສະຫຼະທີ່ມາຈາກພຣະເຈົ້າ.
- ບາງພາສາອາດມີຄໍາເວົ້າທີ່ພິເສດສໍາລັບຄວາມຮັກທີ່ບໍ່ເຫັນແກ່ຕົວແລະເສຍສະຫຼະທີ່ພະເຈົ້າມີ. ວິທີການແປສິ່ງນີອາດປະກອບມີ, "ການອຸທິດຕົນ, ການດູແລທີ່ຊື່ສັດ" ຫຼື "ເບິ່ງແຍງຄວາມເຫັນແກ່ຕົວ" ຫຼື "ຄວາມຮັກຈາກພຣະເຈົ້າ." ໃຫ້ແນ່ໃຈວ່າຄໍາທີ່ໃຊ້ໃນການແປຄວາມຮັກຂອງພຣະເຈົ້າສາມາດປະກອບມີການສະລະຜົນປະໂຫຍດຂອງຕົນເອງເພື່ອປະໂຫຍດແລະຮັກຄົນອື່ນບໍ່ວ່າພວ
- ບາງຄັ້ງຄໍາວ່າ "ຄວາມຮັກ" ໃນພາສາອັງກິດໄດ້ພັນລະນາເຖິງຄວາມເອົາໃຈໃສ່ຢ່າງເລິກເຊິ່ງທີ່ຄົນເຮົາມີ ສໍາລັບໝູ່ເພື່ອນ ແລະ ສະມາຊິກໃນຄອບຄົວ. ບາງພາສາອາດຈະແປພາສານີ້ດ້ວຍຄໍາສັບ ຫລື ປະໂຫຍກທີ່ມີຄວາມໝາຍວ່າ "ຄືກັນຫຼາຍ" ຫລື "ເບິ່ງແຍງຮັກສາ" ຫລື "ມີຄວາມຮັກທີ່ແຮງກ້າ."
- ໃນສະພາບການຄໍາວ່າ "ຮັກ" ຖືກນໍາໃຊ້ເພື່ອສະແດງຄວາມມັກທີ່ໝັກແໜ້ນສໍາລັບບາງສິ່ງບາງຢ່າງ, ສິ່ງນີອາດຈະຖືກແປໂດຍ "ມັກຫຼາຍ" ຫຼື "ມັກຫຼາຍ" ຫຼື "ຄວາມປາດຖະໜາທີ່ສຸດ."
- ບາງພາສາອາດຈະມີຄໍາສັບແຍກຕ່າງຫາກທີ່ໝາຍເຖິງຄວາມຮັກແບບໂລແມນຕິກ ຫລື ຄວາມຮັກທາງເພດລະຫວ່າງສາມີ ແລະ ພັນລະຍາ.
- ຫລາຍພາສາຕ້ອງສະແດງ "ຄວາມຮັກ" ເປັນການກະທໍາ. ດັ່ງນັ້ນຕົວຢ່າງ, ພວກເຂົາອາດຈະແປວ່າ "ຄວາມຮັກແມ່ນຄວາມອົດທົນ, ຄວາມຮັກຈະສະແດງຄວາມກະລຸນາ" ເຊັ່ນດຽວກັນ, "ເມື່ອຄົນຮັກໃຜຜູ້ ໜຶ່ງ, ລາວມີຄວາມອົດທົນແລະໃຈດີຕໍ່ລາວ."

## ຄວາມເຂັ້ມແຂງ,ສ້າງຄວາມເຂັ້ມແຂງ

### ນິຍາມ

ຄໍາວ່າ“ ຄວາມເຂັ້ມແຂງ” ໝາຍເຖິງສະພາບຂອງການເປັນຄົນທີ່ແຂງແຮງທາງດ້ານຮ່າງກາຍ, ຈິດໃຈ, ຫລືທາງຈິດວິນຍານ “ ການສ້າງຄວາມເຂັ້ມແຂງ” ໝາຍຄວາມວ່າຈະເຮັດໃຫ້ບາງຄົນຫຼືບາງສິ່ງບາງຢ່າງເຂັ້ມແຂງ.

- "ຄວາມເຂັ້ມແຂງ" ຍັງໝາຍເຖິງການທີ່ເຮົາສາມາດ ຢືນຂຶ້ນຕໍ່ຕ້ານກັບ ກໍາລັງຝ່າຍຄ້ານບາງຢ່າງ.
- ບຸກຄົນໃດຫນຶ່ງມີຄວາມເຂັ້ມແຂງໃນຈິດໃຈນັ້ນ ເຂົາຈະສາມາດຜ່ານຜ່າການທົດລອງໃດ້.
- ຜູ້ຂຽນບົດເພງສັນລະເສີນຄົນໜຶ່ງເອີນວ່າພະເຢໂຮວາ ວ່າຊຶ່ງເປັນກໍາລັງຂອງລາວ ເຊິ່ງໝາຍຄວາມວ່າພະເຈົ້າຊ່ວຍລາວໃຫ້ເປັນຜູ້ທີ່ເຂັ້ມແຂງ.
- ຖ້າໂຄງສ້າງທາງດ້ານຮ່າງກາຍຄ້າຍຄືກໍາແພງຫລືອາຄານທີ່ຖືກ "ສ້າງຄວາມເຂັ້ມແຂງຂຶ້ນ" ນັ້ນໝາຍຄວາມວ່າປະຊາຊົນກໍາລັງສ້າງໂຄງສ້າງຂຶ້ນມາໃໝ່ເພື່ອເສີມສ້າງໃຫ້ເຂັ້ມແຂງຂຶ້ນດ້ວຍຫີນຫລືດິນຈີ ເພື່ອໃຫ້ມັນສາມາດຕ້ານທານກັບການໂຈມຕີ.

### ຄໍາແນະນໍາໃນການແປ

- ໂດຍທົ່ວໄປ, ຄໍາວ່າ "ສ້າງຄວາມເຂັ້ມແຂງ" ຫລື "ສາຍເຫດໃຫ້ມີຄວາມເຂັ້ມແຂງ" ຫຼື "ເຮັດໃຫ້ມີອໍານາດຫຼາຍຂຶ້ນ".
- ໃນຄວາມໝາຍທາງດ້ານຈິດວິນຍານປະໂຫຍກທີ່ວ່າ "ສ້າງຄວາມເຂັ້ມແຂງໃຫ້ແກ່ພີນ້ອງຂອງທ່ານ" ຫລື "ໝູນໃຈພີນ້ອງຂອງທ່ານ" ຫຼື "ຊ່ວຍພີນ້ອງຂອງທ່ານໃຫ້ອົດທົນ".
- ຕໍ່ໄປນີແມ່ນຕົວຢ່າງຂອງການໃຊ້ຄໍາສັບນີ້ຍ້ອມກັບຄວາມ ໝາຍຂອງແຕ່ລະຄໍາ ເຊິ່ງຍັງເປັນອີກວິທີໜຶ່ງທີ່ພວກເຂົາສາມາດແປໄດ້.
- "ເຮັດໃຫ້ຂ້ອຍເຂັ້ມແຂງຄືກັບສາຍແອວ" ໝາຍຄວາມວ່າ "ເຮັດໃຫ້ຂ້ອຍເຂັ້ມແຂງສົມບູນຄືກັບສາຍແອວທີ່ອ້ອມຮອບແອວຂອງຂ້ອຍຢ່າງສົມບູນ".
- "ໃນຄວາມງຽບສະຫງົບແລະຄວາມໄວ້ວາງໃຈຈະເປັນກໍາລັງຂອງເຈົ້າ" ໝາຍຄວາມວ່າ, "ການກະທໍາຢ່າງງຽບສະຫງົບແລະການໄວ້ວາງໃຈໃນພຣະເຈົ້າຈະເຮັດໃຫ້ເຈົ້າເຂັ້ມແຂງຂຶ້ນທາງດ້ານຈິດວິນຍານ".
- "ຈະສ້າງຄວາມເຂັ້ມແຂງໃໝ່ອີກຄັ້ງ " ໝາຍຄວາມວ່າ, "ຈະເປັນຄົນເຂັ້ມແຂງຂຶ້ນອີກຄັ້ງ".
- "ໂດຍຄວາມເຂັ້ມແຂງແລະສະຕິປັນຍາຂອງຂ້ອຍທີ່ຂ້ອຍໄດ້ເຮັດ" ຫມາຍຄວາມວ່າ "ຂ້ອຍໄດ້ເຮັດສິ່ງທັ້ງຫມົດນີ້ເພາະວ່າຂ້ອຍມີຄວາມເຂັ້ມແຂງແລະສະຫລາດ".

- " ສ້າງຄວາມເຂັ້ມແຂງຂອງກຳແພງ " ໝາຍຄວາມວ່າ, "ເສີມສ້າງກຳແພງໃຫ້ມີຄວາມແຂງແຮງຂຶ້ນ" ຫຼື "ສ້າງກຳແພງ ໃໝ່ອີກຄັ້ງ".
- "ຂ້ອຍຈະສ້າງຄວາມເຂັ້ມແຂງໃຫ້ເຈົ້າ" ໝາຍຄວາມວ່າ "ຂ້ອຍຈະເຮັດໃຫ້ເຈົ້າເຂັ້ມແຂງຂຶ້ນ".
- "ໃນພຣະຢາເວອົງດຽວເທົ່ານັ້ນທີ່ເປັນຄວາມລອດແລະຄວາມເຂັ້ມແຂງ" ຫມາຍຄວາມວ່າ "ພຣະຢາເວຊົງເປັນຜູ້ດຽວທີ່ຊ່ວຍພວກເຮົາແລະເສີມສ້າງຄວາມເຂັ້ມແຂງໃຫ້ພວກເຮົາ".
- "ສິລາແຫ່ງຄວາມເຂັ້ມແຂງຂອງທ່ານ" ໝາຍຄວາມວ່າ, "ອົງຜູ້ຊົງສັດທີ່ເຮັດໃຫ້ເຈົ້າເຂັ້ມແຂງ".
- "ດ້ວຍພະລັງແຫ່ງການຊ່ວຍເຫລືອດ້ວຍມືຂວາຂອງພຣະອົງ" ໝາຍຄວາມວ່າ, ພຣະອົງໄດ້ຊ່ວຍທ່ານຢ່າງໜັກຈາກບັນຫາຄືກັບຄົນທີ່ຍູ້ທ່ານຢ່າງປອດໄພດ້ວຍມືຂວາທີ່ເຂັ້ມແຂງຂອງພຣະອົງ".
- "ດ້ວຍຄວາມເຂັ້ມແຂງພຽງເລັກນ້ອຍ" ຫມາຍຄວາມວ່າ, "ບໍ່ເຂັ້ມແຂງຫຼາຍ" ຫຼື "ອ່ອນແອ".
- "ດ້ວຍຄວາມເຂັ້ມແຂງຂອງຂ້ອຍທັງຫມົດ" ຫມາຍຄວາມວ່າ, "ການໃຊ້ຄວາມພະຍາຍາມທີ່ດີທີ່ສຸດຂອງຂ້ອຍ" ຫຼື "ຢ່າງເຂັ້ມແຂງແລະສົມບູນ".

## ຄວາມເຄົາລົບ

### ນິຍາມ

ຄຳວ່າ "ຄວາມເຄົາລົບ" ໝາຍເຖິງຄວາມຮູ້ສຶກທີ່ມີຄວາມເຄົາລົບນັບຖືຢ່າງເລິກເຊິ່ງຕໍ່ບາງຄົນຫຼືບາງສິ່ງບາງຢ່າງ.

- ຄວາມຮູ້ສຶກຂອງຄວາມເຄົາລົບສາມາດເຫັນໄດ້ໃນການກະ ທຳ ທີ່ໃຫ້ກຽດແກ່ຄົນທີ່ມີຄວາມເຄົາລົບ.
- ຄວາມຢ້ານກົວຂອງພຣະຜູ້ເປັນເຈົ້າແມ່ນຄວາມເຄົາລົບພາຍ ໃນເຊິ່ງສະແດງອອກໃນຕົວເອງໃນການເຊື່ອຟັງພຣະບັນຍັດຂອງພຣະເຈົ້າ.
- ຄຳສັບນີ້ຍັງສາມາດຖືກແປວ່າ "ຄວາມຢ້ານກົວແລະກຽດຕິ ຍົດ" ຫລື "ຄວາມນັບຖືທີ່ຈິງໃຈ".

## ຄວາມເຊື່ອ

### ນິຍາມ

ໂດຍທົ່ວໄປແລ້ວ, ຄຳວ່າ ຄວາມເຊື່ອ" ແມ່ນເວົ້າເຖິງ ຄວາມສັດທາ, ຄວາມວາງໃຈ ຫລືຄວາມໝັ້ນໃຈໃນບາງຄົນຫລືບາງສິ່ງ.

- ການ "ມີຄວາມເຊື່ອ" ໃນບາງຄົນແມ່ນການສັດທາວ່າ ສິ່ງທີ່ລາວເວົ້າແລະເຮັດນັ້ນຈິງແລະໄວ້ໃຈໄດ້.
- ການ "ມີຄວາມເຊື່ອໃນພຣະເຢຊູ" ໝາຍເຖິງການສັດທາໃນຄຳສອນທຸກຢ່າງຂອງພຣະເຈົ້າທີ່ກ່ຽວຂ້ອງກັບພຣະເຢຊູ. ໂດຍສະເພາະຍ່າງຍິ່ງໝາຍເຖິງຄົນທີ່ວາງໃຈໃນພຣະເຢຊູ ແລະການເສຍສະລະເພື່ອຊຳລະພວກເຂົາຈາກຄວາມບາບຂອງພວກເຂົາ ແລະເພື່ອຊ່ອຍພວກເຂົາຈາກການຖືກລົງໂທດທີ່ພວກເຂົາຄວນໄດ້ຮັບ ເພາະຄວາມບາບຂອງພວກເຂົາ.
- ຄວາມເຊື່ອທີ່ແທ້ຈິງ ຫລືສັດທາໃນພຣະເຢຊູຈະເຮັດໃຫ້ຄົນນັ້ນເກີດຜົນດີທາງຝ່າຍວິນຍານ ຫລືທາງການປະພຶດເພາະວ່າ ພຣະວິນຍານບໍຣິສຸດຢູ່ໃນເຂົາ.
- ບາງເທື່ອ "ຄວາມເຊື່ອ" ເວົ້າທົ່ວໆ ໄປເຖິງຄຳສອນທັ້ງໝົດກ່ຽວກັບພຣະເຢຊູ, ເຊັ່ນດຽວກັບການສະແດງອອກທີ່ວ່າ, "ຄວາມຈິງຂອງຄວາມເຊື່ອ."
- ໃນບາງຂໍ້ເຊັ່ນ "ຮັກສາຄວາມເຊື່ອ" ຫລື "ປະຖິ້ມຄວາມເຊື່ອ" ຄຳວ່າ "ຄວາມເຊື່ອ" ກ່າວເຖິງຄຳເວົ້າ ຫລືເງື່ອນໄຂຂອງຄວາມສັດທາໃນຄຳສອນທັ້ງໝົດກ່ຽວກັບພຣະເຢຊູ.

### ຄຳແນະນຳການແປ

- ໃນບາງຂໍ້ຄວາມ "ຄວາມເຊື່ອ" ສາມາດແປໄດ້ວ່າ "ສັດທາ" ຫລື "ຄວາມເຊື່ອໝັ້ນ" ຫລື "ຄວາມໝັ້ນໃຈ" ຫລື "ຄວາມໄວ້ໃຈ."
- ໃນບາງພາສາຄຳເຫລົ່ານີ້ຈະແປໂດຍການໃຊ້ຮູບແບບຂອງຄຳກິລິຍາວ່າ "ສັດທາ."

## ຄວາມເມດຕາ, ມີຄວາມເມດຕາ, ພຣະເມດຕາ

### ນິຍາມ

ຄຳວ່າ "ຄວາມເມດຕາ" ກ່າວເຖິງຄວາມຫ່ວງໃຍຜູ້ອື່ນ ໂດຍສະເພາະຢ່າງຍິ່ງຄົນເຫຼົ່ານັ້ນທີ່ໄດ້ຮັບຄວາມທຸກຍາກ. ຄົນທີ "ມີຄວາມເມດຕາ" ຫ່ວງໃຍຄົນອື່ນ ແລະຊ່ວຍເຫຼືອພວກເຂົາ.

- ຄຳວ່າ "ຄວາມເມດຕາ" ມັກຈະລວມເຖິງການໃສ່ໃຈຄົນທີ່ຂັດສົນ, ແລະການທຳການຊ່ວຍເຫຼືອພວກເຂົາດ້ວຍ.
- ພຣະຄຳພີບອກວ່າພຣະເຈົ້າຊົງພຣະເມດຕາ, ນັ້ນຄື, ພຣະອົງ


generated on Thu Jul 10 08:45:04 2025

ຊຶ່ງປ່ຽມດ້ວຍຄວາມຮັກ ແລະຄວາມເມດຕາ.

- ໃນຈົດໝາຍຂອງໂປໂລ ທີ່ໄປເຖິງຊາວໂກໂລຊາຍ, ທ່ານບອກພວກເຂົາໃຫ້ "ສວມໃຈເມດຕາ." ທ່ານສອນພວກເຂົາໃຫ້ໃສ່ໃຈ

ຜູ້ຄົນ ແລະທຳການຊ່ວຍເຫຼືອຄົນອື່ນໆທີ່ຂັດສົນ.

#### ຄຳແນະນຳໃນການແປ

- ຄວາມໝາຍຕາມຕົວອັກສອນຂອງຄຳວ່າ "ຄວາມເມດຕາ" ຄື " ຄວາມເຫັນໃຈດ້ວຍຄວາມເມດຕາ." ຄຳນີ້ເປັນສຳນວນທີ່ໝາຍເຖິງ "ຄວາມເມດຕາ" ຫຼື "ສົງສານ." ບາງພາສາອາດຈະມີສຳນວນພາສາຂອງຕົນເອງໃນການແປຄຳນີ້.
- ການແປ "ຄວາມເມດຕາ" ໃນຮູບແບບອື່ນໆ ສາມາດລວມເຖິງ"ຄວາມໃສ່ໃຈຢ່າງເລິກເຊິ່ງຕໍ່" ຫຼື "ການຊ່ວຍເຫຼືອທີ່ເຕັ້ມດ້ວຍຄວາມເມດຕາ."
- ຄຳວ່າ "ເມດຕາ" ສາມາດແປໄດ້ວ່າ "ການໃສ່ໃຈແລະຊ່ວຍເຫຼືອຢ່າງເຕັ້ມທີ" ຫຼື "ປ່ຽມດ້ວຍຄວາມຮັກແລະເມດຕາຢ່າງເລິກເຊິ່ງ."

## ຄວາມເລິກລັບ, ຄວາມຈິງທີ່ຖືກປິດຊ້ອນໄວ້

#### ນິຍາມ

ໃນພຣະຄັມພີຄຳວ່າ"ຄວາມເລິກລັບ"ອ້າງເຖິງບາງສິ່ງທີ່ບໍ່ຮູ້ແລະຢາກຈະເຂົ້າໃຈວ່າພຣະເຈົ້າຊົ່ງອະທິບາຍ.

- ໃນພັນທະສັນຍາໃໝ່ກ່າວໄວ້ວ່າຂ່າວປະເສີດຂອງພຣະເຢຊູຄຣິດເຈົ້າເປັນຄວາມເລິກລັບທີ່ບໍ່ເຄີຍໄດ້ຮູ້ໃນອະດີດ.
- ໜຶ່ງໃນຈຸດທີ່ພິເສດໄດ້ອະທິບາຍວ່າໄວ້ເປັນຄວາມເລິກລັບຂອງຊາວຢິວຫຼືຄົນຕ່າງຊາດຈະເຫົ້າຫຽມກັນໃນພຣະຄຣິດເຈົ້າ.
- ຄຳນີ້ສາມາດແປໄດ້ອີກວ່າ "ຄວາມລັບ" ຫຼື "ສິ່ງທີ່ປິດຊ້ອນຢູ່" ຫຼື "ສິ່ງທີ່ບໍ່ເຄີຍຮູ້ "

## ຄວາມໂກດຮ້າຍ, ຄວາມຄຽດຮ້າຍແຮງ

#### ນິຍາມ

ຄວາມຄຽດຮ້າຍເປັນຄວາມຄຽດຢ່າງຮ້າຍແຮງຊຶ່ງບາງຄັ້ງກໍຍັງຄ້າງຢູ່ໃນໃຈຂອງພວກເຮົາໂດຍສະເພາະໝາຍເຖິງການພິພາກສາອັນຊອບທຳຂອງພຣະເຈົ້າກ່ຽວ

- ໃນພຣະຄຳພີ "ຄວາມໂກດຮ້າຍ" ໂດຍປົກກະຕິແລ້ວແມ່ນຄວາມໂກດຂອງພຣະເຈົ້າຕໍ່ມະນຸດທັ້ງຫຼາຍທີ່ໄດ້ທຳບາບຕໍ່ສູ້ພຣະອົງ.
- "ຄວາມໂກດຮ້າຍຂອງພຣະເຈົ້າ" ຍັງໄດ້ກ່າວເຖິງການພິພາກສາແລະການລົງໂທດເພາະຄວາມບາບ.
- ຄວາມໂກດຮ້າຍຂອງພຣະເຈົ້າເປັນການລົງໂທດທີ່ຊອບທຳແກ່ມະນຸດທີ່ບໍ່ກັບໃຈຈາກບາບຂອງພວກເຂົາ.

#### ຄຳແນະນຳໃນການແປ:

- ຂຶ້ນຢູ່ກັບກໍລະນີ ໃນວິທີອື່ນໆ ທີ່ໃຊ້ເມື່ອຄວາມນີ້ອາດຮວມເຖິງ

"ຄວາມໂກດຮ້າຍ" ຫຼື "ການພິພາກສາທີ່ຊອບທຳ" ຫຼື "ຄວາມໂກດ."

- ເມື່ອເວົ້າເຖິງພຣະພິໂລດຂອງພຣະເຈົ້າ
ຈົ່ງໃຫ້ແນ່ວ່າຄຳຫຼືຖ້ອຍຄຳທີ່ໃຊ້ໃນການແປໃນຄຳນີ້ບໍ່ໄດ້ໝາຍເຖິງການໂມໂຫຮ້າຍດ້ວຍຄວາມບາບຫຼືຄວາມໂກດຂອງພຣະເຈົ້າເປັນຄວາມຍຸຕິທຳແລະບໍ

## ຄວາມໝັ້ນໃຈ, ໝັ້ນໃຈ

#### ນິຍາມ

ຄຳວ່າ "ໝັ້ນໃຈ" ແລະ "ຄວາມໝັ້ນໃຈ" ກ່າວເຖິງຄວາມແນ່ໃຈວ່າບາງສິ່ງວ່າເປັນຄວາມຈິງ ຫຼືບາງຢ່າງຈະເກີດຂຶ້ນຢ່າງແນ່ນອນ.

- ໃນພຣະຄຳພີ ຄຳວ່າ "ຄວາມຫວັງ" ຫລາຍຄັ້ງຫມາຍເຖິງການລໍຄອຍຢ່າງຄາດຫວັງວ່າບາງສິ່ງຈະເກີດຂຶ້ນຢ່າງແນ່ນອນ

ULB ມັກຈະແປວ່ຄຳນີ້ວ່າ "ຄວາມຫມັ້ນໃຈ" ຫຼື "ຄວາມຫມັ້ນໃຈສຳລັບອະນາຄົດ" ໂດຍສະເພາະຢ່າງຍິ່ງເມື່ອຫມາຍເຖິງ
ຄາວມຫມັ້ນໃຈເຖິງການໄດ້ຮັບໃນສິ່ງທີ່ພຣະເຈົ້າຊົ່ງສັນຍາກັບຜູ້ເຊື່ອໃນພຣະເຢຊູ.

- ຫລາຍຄັ້ງທີ່ຄຳວ່າ "ຄວາມຫມັ້ນໃຈ" ກ່ວາຢ່າງສະເພາະເຈາະຈົ່ງເຖິງພຣະສັນຍາທີ່ແນ່ນອນຂອງພຣະເຈົ້າ ໂດຍສະເພາະຢ່າງຍິ່ງ ຄວາມແນ່ນອນໃນວັນຫນຶ່ງ ຜູ້ທີ່ເຊື່ອໃນພຣະເຢຊູທຸກຄົນຈະໄດ້ຢູ່ກັບພຣະເຈົ້າໃນສະຫວັນຕລອດໄປເປັນນິດ.

- ຄຳເວົ້າທີ່ວ່າ "ມີຄວາມໝັ້ນໃຈໃນພຣະເຈົ້າ " ໝາຍເຖິງການເຕັ້ມປ່ຽມດ້ວຍວາມຄາດຫວັງ ທີ່ຈະໄດ້ຮັບແລະມີປະສົບການໃນສິ່ງທີ່ພຣະເຈົ້າໄດ້ຊົງສັນຍາໄວ້.
- ມີ "ຄວາມໝັ້ນໃຈ" ໝາຍຄວາມວ່າຄວາມເຊື່ອໃນພຣະສັນຍາຂອງພຣະເຈົ້າ ແລະກະທຳດ້ວຍຄວາມແນ່ໃຈວ່າພຣະເຈົ້າຈະຊົງກະທຳໃນສິ່ງທີ່ພຣະອົງໄດ້ຊົງກ່າວ ຄຳນີ ສາມາດມີຄວາມໝາຍຂອງການກະທຳ ຢ່າງກ້າຫານ ແລະມີກຳລັງໃຈ.

**ຄຳແນະນຳໃນການແປ**

- ຄຳວ່າ"ໝັ້ນໃຈ"ສາມາດແປໄດ້ວ່າ "ມີຄວາມໝັ້ນໃຈ"

ຫຼື "ແນ່ໃຈຫລາຍ" .

- ຄຳເວົ້າ "ຈົ່ງໝັ້ນໃຈ"ສາມາດແປໄດ້ວ່າ "ໄວ້ວາງໃຈຢ່າງເຕັ້ມທີ" ຫຼື" ແນ່ໃຈຢ່າງເຕັ້ມທີ່ກ່ຽວກັບ" ຫຼື" ຮູ້ໂດຍບໍ່ສົງໃສ" .
- ຄຳວ່າ " ຢ່າງໝັ້ນໃຈ" ສາມາດແປໄດ້ວ່າ" ຢ່າງກ້າຫານ" ຫຼື

"ຢ່າງແນ່ໃຈ".

- ການແປ ຄຳວ່າ "ຄວາມໝັ້ນໃຈ" ໃນຮູບແບບອື່ນໆ ທີ່ຂຶ້ນ

ຢູ່ກັບເນື້ອຫາ ສາມາດລວມເຖິງ " ຄວາມໝັ້ນໃຈຢ່າງເຕັ້ມທີ " ຫຼື "ຄວາມຄາດຫວັງທີ່ແນ່ໃຈ" ຫຼື "ຄວາມຄາດຫວັງທີ່ໝັ້ນໃຈ .

## ຄວາມມືດ

**ນິຍາມ**

ຄຳວ່າ "ຄວາມມືດ" ຕາມຕົວອັກສອນ ຫລາຍເຖິງການຂາດແສງ ນອກຈາກນີ ຍັງມີຫລາຍ ຄວາມໝາຍທີ່ເປັນທຳນອງປຽບທຽບຂອງຄຳນີ:

- ຄຳອຸປະມາວ່າ " ຄວາມມືດ" ໝາຍເຖິງ "ສິ່ງສົກປົກ" ຫລື "ຊົ່ວຮ້າຍ" ຫລື ຕ"ບອດຝ່າຍຈິດວິນຍານ"
- ນອກຈາກນີ ຍັງເວົ້າເຖິງຫຍັງ ທີ່ກ່ຽວຂ້ອງ ກັບບາບ ແລະການເຊື່ອມຊາມທາງສິລະທັມ.
- ຄຳກ່າວວ່າ " ອຳນາດແຫ່ງຄວາມມືດ" ກ່າວເຖິງທຸກສິ່ງທີ່ຊົ່ວຮ້າຍ.ແລະຖືກຄຸ້ມຄອງ ໂດຍຊາຕານ.
- ຄຳວ່າ " ຄວາມມືດ" ສມາດໃຊ້ເປັ່ນ ຄຳອຸປະມາ ສຳຫັບຄວາມຕາຍ ເບິ່ງທີ:
- ຄົນທີ່ບໍ່ຮູ້ຈັກພຣະເຈົ້າຈະເວົ້າວ່າ " ດຳເນີນຊີວິດຢູ່ໃນຄວາມມືດ",ຊຶ່ງໝາຍຄວາມວ່າ ພວກເຂົາບໍ່ເຂົ້າໃຈ ຫລືປະຕິບັດຕາມຄວາມຊອບທັມ.
- ພຣະເຈົ້າທົ່ງເປັ່ນຄວາມສວ່າງ " ຄວາມຊອບທັມ"ແລະຄວາມມືດຄວາມ "ຊົ່ວ"ບໍ່ສາມາດ ເອົາຊະນະແສງສວ່າງ ດັ່ງກ່າວໄດ້
- ສຖານທີ ແຫ່ງການລົ່ງໂທດ ສຳຫລັບຜູ້ປະຕິເສດພຣະເຈົ້າມັກຖືກກ່າວ ເຖິງວ່າ " ທີ່ມືດຂ້າງນອກ"

**ຄຳແນະນຳໃນການແປ**

- ທີ່ດີ ທີ່ສຸດ ຄືການແປຄຳນີ, ຕາມຕົວອັກສອນ ດ້ວຍຄຳໃນພາສາ ຂອງໂຄງການ ທີ່ອ້າງຖືງການຂາດແສງສວ່າງ ນີ

ອາດຈະເປັ່ນຄຳ ທີ່ກ່າວເຖິງຄວາມມືດ ໃນຫ້ອງທີ່ບໍ່ມີແສງສະຫວ່າງ ເປັ່ນວິທີການອະທິບາຍ ຄວາມຊົ່ວຮ້າຍແລະການຫລອກລວງ ທີ່ກົງກັນຂ້າມ ກັບ ຄວາມດີແລະຄວາມຈິງ.

- ວິທີອື່ນ ໃນການແປຄຳນີອາດຈະເປັ່ນ, "ຄວາມມືດຂອງກາງຄືນ" ອັນນີຂຶ້ນຢູ່ກັບບໍ່ຣິບົດນັ້ນໆ.

## ຄອບຄອງ, ຊັບສິນໃນຄອບຄອງ

**ນິຍາມ**

ຄຳວ່າ''ຄອບຄອງ ''ແລະ ''ຊັບສິນໃນຄອບຄອງ'' ປົກກະຕິຄໝາຍເຖິງການເປັ່ນເຈົ້າຂອງບາງສິ່ງບາງຢ່າງ ແລະຄຳພວກນີ້ຍັງໝາຍເຖິງການເພີ່ມການປົກຄອງເໜືອບາງສິ່ງບາງຢ່າງຫລືຍຶດຄອງຝືນທີ່ບາງແຫ້ງຂອງຝືນດິນ.

- ໃນພັນທະສັນຍາເດີມ, ຄຳນີ້ມັກໃຊ້ໃນກໍລະນີຂອງ''ການຄອງຄອງ''ຫລື''ການຍຶດຊັບສິນໃນຄອບຄອງ''ຝືນທີ່ບາງແຫ່ງຂອງແຜ່ນດິນ.

- ເມື່ອພຣະເຢໂຮວາໄດ້ຊົງບັນຊາຊາວອິດສະຣາເອນ ໃຫ້''ຄອບຄອງ''ແຜ່ນດິນການາອານ, ນັ້ນໝາຍເຖິງພວກເຂົາຕ້ອງເຂົ້າໄປໃນແຜ່ນດິນແລະອາໃສ່ຢູ່ທີ່ນັ້ນ. ນີ້ກ່ຽວຂອ້ງກັບການຊະນະຄົນການາອານຄັ້ງທຳອິດທີ່ອາໄສຢູ່ໃນແຜ່ນດິນນັ້ນ.


generated on Thu Jul 10 08:45:04 2025

- ພຣະເຢໂຮວາ ໄດ້ເວົ້າກັບຊາວອິດສະຣາເອນວ່າພຣະອົງໄດ້ປະທານແຜ່ນດິນການາອານໃຫ້ເປັນ''ຊັບສົມບັດຂອງພວກເຂົາ'' ນີ້ສາມາດແປໄດ້ວ່າ''ເປັນສະຖານທີ່ໂດຍຊອບທຳທີ່ຈະອາໄສຢູ່.''

- ຄົນອິດສະຣາເອນຍັງເອີ້ນວ່າ ''ຊັບສົມບັດໃນຄອບຄອງພິເສດ'' ຂອງພຣະເຢໂຮວາ.'' ໝາຍເຖິງພວກເຂົາເປັນຂອງພຣະອົງໃນຖານະປະຊາກອນຂອງພຣະອົງຜູ້ທີ່ຖືກພຣະອົງເອີ້ນມາສະເພາະເຈາະຈົງເພື່ອໃຫ້ນະມັດສະການຮັບໃຊ້ພຣະອົງ.

  %ຄຳແນະນຳໃນການແປ

- ຄຳວ່າ '' ຄອບຄອງ'' ສາມາດແປວ່າ ''ເປັນເຈົ້າຂອງ'' ຫລື''ມີ''

'' ຫລື ''ມີອຳນາດເໜືອ''

- ຄຳວ່າ ''ການຍຶດຄອງ''ສາມາດແປວ່າ ''ການຄວບຄຸມ'' ຫລື ' ' ''ຄອບຄອງ ''ຫລື ''ອາໄສຢູ່ເທິງ'' ຂຶ້ນຢູ່ກັບກໍລະນີ.

- ເມື່ອອ້າງເຖິງສິ່ງທີ່ຄົນເປັນເຈົ້າຂອງ '' ຊັບສິນໃນຄອບຄອງ''

  ສາມາດແປວ່າ ''ຊັບສິນທີ່ເປັນເຈົ້າຂອງ'' ຫລື '' ຊັບສິນ'' ຫລື ''ສິ່ງທີ່ເປັນເຈົ້າຂອງ'' ຫລື ''ສິ່ງຕ່າງໆ ທີ່ພວກເຂົາເປັນເຈົ້າຂອງ''

- ເມື່ອພຣະເຢໂຮວາຊົງເອີ້ນພວກອິດສະຣາເອນ'' ຊັບສິນພິເສດຂອງເຮົາ'' ນັ້ນສາມາດແປວ່າ ''ປະຊາກອນພິເສດຂອງເຮົາ'' ຫລື'' ປະຊາກອນທີ່ເປັນຂອງເຮົາ'' ຫລື ''ປະຊາກອນຂອງເຮົາທີ່ເຮົາຮັກແລະປົກຄອງ.''

- ປະໂຍກ''ຂອງນັ້ນຈະເປັນຊັບສິນຂອງເຂົາ''ເມື່ອອ້າງເຖິງແຜ່ນດິນ ຫມາຍຄວາມວ່າ '' ພວກເຂົາຈະຄອບຄອງແຜ່ນດິນ '' ຫລື ''ແຜ່ນດິນຈະເປັນຂອງພວກເຂົາ. ''

- ຄຳກ່າວ ''ພົບໃນຊັບສິນຂອງເຂົາ '' ສາມາດແປວ່າ '' ທີ່ເຂົາກຳລັງຖືຢູ່'' ຫລື'' ທີ່ເຂົາໄດ້ມີກັບເຂົາ.''

- ຄຳວ່າ''ຊັບສິນຂອງທ່ານ''ສາມາດແປວ່າ '' ທີ່ເຂົາກຳຖືຢູ່ ''ຫລື'' ທີ່ເຂົາໄດ້ມີກັບເຂົາ. ''

- ຄຳວ່າ''ຊັບສິນຂອງທ່ານ'' ສາມາດແປວ່າ '' ເຊັ່ນບາງສິ່ງທີ່ເປັນຂອງທ່ານ'' ຫລື '' ເຊັ່ນສະຖານທີ່ທີ່ປະຊາຊົນຂອງທ່ານຈະອາໄສເປັນຂອງທ່ານ'' ຫລື '' ເຊັ່ນສະຖານທີ່ທີ່ປະຊາກອນຊອງທ່ານອາໄສຢູ່.''

- ຄຳວ່າ '' ໃນຊັບສິນຂອງເຂົາ'' ສາມາດແປໄດ້ວ່າ ''ທີ່ເຂົາເປັນເຈ້າຂອງ'' ຫລື '' ເຊິ່ງເປັນຂອງເຂົາ.''

## ຄອບຄົວ

### ນິຍາມ

ຄຳວ່າ "ຄອບຄົວ" ແມ່ນເວົ້າເຖິງກຸ່ມຄົນທີ່ມີຄວາມສຳພັນທາງສາຍເລືອດ ແລະໂດຍປົກກະຕິແລ້ວຈະໝາຍເຖິງ ພໍ, ແມ່, ແລະບັນດາລູກໆ ຂອງເຂົາເຈົ້າ. ບາງເທື່ອຈະລວມເຖິງພີ່ນ້ອງໃນລະດັບອື່ນໆ ນຳເຊັ່ນ ປູ່, ຍ່າ, ຕາ, ຍາຍ, ຫລານ, ລຸງແລະປ້າ.

- ຄອບຄົວຊາວເຮັບເຣີ ເປັນຄອບຄົວຊຸມຊົນທາງສາສນາທີ່ສືງຕໍ່ປະເພນີຜ່ານທາງການນະມັດສະການແລະການສັ່ງສອນ.
- ໂດຍທົ່ວໄປແລ້ວ ພໍ່ເປັນຜູ້ທີ່ມີອຳນາດສຳຄັນທີ່ສຸດຂອງຄອບຄົວ.
- ຄອບຄົວ ອາດຈະລວມທັ້ງຄົນໃຊ້ ເມຍນ້ອຍ ຫລືແມ່ນກັບທັ້ງເຖິງຄົນຕ່າງຊາດ.
- ບາງພາສາອາດຈະມີຖ້ອຍຄຳທີ່ກວ້າງເຊັ່ນ "ຕະກູນ" ຫລື "ຄົວເຮືອນ" ທີ່ເໝາະສົມກັບໃນຖ້ອຍຄຳຫລາຍກວ່າຄຳວ່າຜູ້ປົກຄອງ ຫລືລູກຫລານທີ່ຖືກເວົ້າເຖິງ.
- ຄຳວ່າ "ຄອບຄົວ" ຖືກໃຊ້ເພື່ອເວົ້າເຖິງຄົນຜູ້ທີ່ມີຄວາມສຳພັນ ຝ່າຍວິນຍານເຊັ່ນ ຄົນຜູ້ຊຶ່ງເປັນສ່ວນນຶ່ງໃນຄອບຄົວຂອງພຣະເຈົ້າ ເພາະເຂົາເຈົ້າເຊື່ອສັດທາໃນພຣະເຢຊູ.

## ຄັນໄຖ

### ນິຍາມ

"ຄັນໄຖ"ເປັນເຄື່ອງມືການກະເສດທີ່ໃຊ້ເພື່ອການຂຸດໄຖດິນເພື່ອຕຽມທີ່ສຳລັບການປູກຝັ່ງ

- ຄາດມີຄວາມຄົມ ປາຍແຫຼມຄົມນັ້ນໃຊ້ຂຸດລົງໄປໃນດິນ ໂດຍທົ່ວໄປຈະມີດ້ານຈັບທີ່ຊາວນາໃຊ້ບັງຄັບຄາດ
- ໃນສະໄໝຂອງພຣະຄຳພີ ຄັນໄຖນັ້ນມັກຈະໃຊ້ງົວຕົວຜູ້ໜຶ່ງຄູ່ຫລືສັດເຮັດວຽກອື່ນດຶງຄັນໄຖ
- ຄາດສ່ວນໃຫຍ່ເຮັດມາຈາກໄມ້ແຂງນອກຍົກເວັ້ນປາຍທີ່ຄົມທີ່ເຮັດດ້ວຍໂລຫະເຊັ່ນທອງສຳລິດຫລືເຫຼັກ


generated on Thu Jul 10 08:45:04 2025

## ຄັບຣິເອນ

### ຂ້ເທັດຈິງ

ຄັບຣິເອນ ຄືຊື່ຂອງທຸດສະຫວັນຕົນນຶ່ງຂອງພຣະເຈົ້າ. ເຂົາຖືກກ່າວເຖິງໂດຍຊື່ນີ້ອີກຫລາຍຄັ້ງ,ໃນພັນທະສັນຍາເດີມແລະພັນທະສັນຍາໃຫ່ມ.

- ພຣະເຈົ້າໄດ້ສົ່ງ ຄັບຣິເອນ ມາແຈ້ງຂ່າວແກ່ຊຸ່ປະກາດພຣະທັມດານີເອນ ເຖິງຄວາມໝາຍນິມິດທີເຂົາໄດ້ເຫັນ.
- ອີກຄັ້ງນຶ່ງ, ຂະນະທີ ດານີເອນ ກຳລັງອະທິຖານ, ທຸດສະຫ້ວນ
  ຄັບຣິເອນໄດ້ບິນມາຫາເຂົາແລະໃຫ້ຄຳພະຍາກອນກ່ຽວກັບສິ່ງທີຈະເກີດໃນອະນາຄົດ.ດານີເອນ ໄດ້ບັນລະຍາຍເຖິງເຂົາວ່າ"ຜູ້ຊາຍ.''
- ໃນພັນທະສັນຍາໃໝ່ມີການບັນທຶກວ່າ ຄັບຣິເອນ ໄດ້ມາຫາ ເສກາຣີຢາໃຫ້ຄຳພະຍາກອນວ່າພັນລະຍາສູງອາຍຸ
  ເອລີຊາເບັດຈະມີບຸດຊາຍຄື, ໂຢຮັນ.
- ຫລັງຈາກອີກຫົກເດືອນ, ຄັບຣິເອນ ໄດ້ຖືກສົ່ງມາຫາ ມາຣີ
  ເພືອບອກກັບລາວວ່າພຣະເຈົ້າທຳການອັດສະຈັນໃຫ້ລາວຕັ້ງທ້ອງຊຶ່ງຈະເປັ້ນ " ພຣະບຸດຂອງພຣະເຈ້ົາ. " ຄັບຣິເອນ ໄດ້ບອກ ມາຣີ
  ວ່າຊື່ຂອງບຸດຊາຍຄື " ພຣະເຢຊູ. "

## ຄາດ, ຮັດ

### ນິຍາມ

ຄຳວ່າ "ຄາດ "ຫມາຍເຖິງໃຊ້ສາຍຄາດເພືອຮັດຮອບໆ ຂອງບາງສິ່ງ
ມັນອ້າງເຖິງການການໃຊ້ສາຍແອວຫລືເຊືອກມັດແອວເພືອເຮັດໃຫ້ເສືອຊັ້ນນອກຫລືເສືອຄຸມສາມາດຢູ່ໄດ້.

- ຄຳເວົ້າທົ່ວໄປໃນພຣະຄັມພີ "ຄາດແອວຂອງທ່ານ"
  ໝາຍເຖິງເອົາເສືອຄຸມສອດເຂົ້າໄປໃນສາຍແອວເພືອໃຫ້ສາມາດເຮັດວຽກສະດວກ.
- ຄຳເວົ້ານີໝາຍຄວາມວ່າໃຫ້ກຽມພ້ອມສຳລັບການທຳງານຫລືໃຫ້ຕຽມທີຈະເຮັດບາງສິ່ງທີຍາກ.
- ຄຳເວົ້າ
  "ຄາດແອວຂອງທ່ານ"ສາມາດແປໄດ້ໂດຍໃຊ້ສຳນວນໃນພາສາເປົ້າໝາຍທີມີຄວາມໝາຍຄືກັນ.ຫຼືສາມາດແປໂດຍບໍ່ຕ້ອງມີການປຽບທຽບເຊັ່ນ
  "ຕຽມຕົວເອງໃຫ້ພ້ອມທີຈະຮັບການກະທຳ "ຫລື "ກຽມຕົວເອງໃຫ້ພ້ອມ".
- ຄຳວ່າ "ຄາດດ້ວຍ"ສາມາດແປວ່າ "ລ້ອມຮອບດ້ວຍ" ຫຼື "ພັນດ້ວຍ "ຫຼື "ຮັດດ້ວຍ."

## ຄາລາເຕຍ

### ຂ້ເທັດຈິງ

ໃນພັນທະສັນຍາໃໝ່, ຄາລາເຕຍເປັນແຄ້ວນນຶ່ງຂອງກຸງໂຣມຕັ້ງຢູ່ໃຈກາງເມືອງຂອງຕຸກກີໃນປະຈຸບັນ.

- ສ່ວນຂອງຄາລາເຕຍເປັນຊາຍເຂດແດນຂອງທະເລດຳໄປທາງເໜືອ ແລະ ມັນຍັງເປັນຊາຍເຂດຂອງເມືອງຕ່າງໆ ຂອງເອເຊຍ,
  ບີໄທເນຍ, ກາປາໂດເກຍ, ເຊນລີເຊຍ, ແລະປາມຝີເລຍ.
- ອັກຄະສາວົກ ໂປໂລ ຂຽນຈົດໝາຍເຖິງຄຣິສະຕຽນຄົນທີອາໃສຢູ່ໃນແຄ້ວນຄາລາເຕຍ.
  ຈົດໝາຍນັ້ນຢູ່ໃນພັນທະສັນຍາໃໝ່ຊື່ພຣະທັມ "ຄາລາເຕຍ. "
- ນຶ່ງໃນເຫດຜົນທີໂປໂລຂຽນຈົດໝາຍເຖິງຜູ້ນັ້ອງຄາລາເຕຍກໍເພືອເນັ້ນຢ້ຳໃນເລືອງຂ່າວປະເສີດຂອງຄວາມລອດໂດຍພຣະຄຸນ
  ບໍ່ແມ່ນດ້ວຍການງານທີເຮັດ.
- ຄຣິສະຕຽນໃນເມືອງຕ່າງໆຊຸກຄາລາເຕຍໄດ້ຮັບການສອນຈາກຄຣິສະຕຽນທີເປັ້ນຄົນຢິວໃຫ້ຮັກສາພຣະບັນຍັດຂອງຄົນຢິວ.

## ຄາລີເລ,ຊາວຄາລີລຽນ

### ຂ້ເທັດຈິງ

ແຄ້ວນ ຄາລີເລ ຕັ້ງຢູ່ທິດເໜືອສຸດ,ທາງທິດເໜືອຂອງແຄ້ວນຊາມາເຣຍ.''ຊາວຄາລີລຽນ''ຄືຄົນທີອາໃສຢູ່ໃນເມືອງຄາລີເລ.

- ແຄ້ວນຄາລີເລ,ຊາມາເຣຍ,ແລະຢຸດາຄືແຄ້ວນຫລັກສາມ

ແຄ້ວນຂອງອິສາຣະເອນໃນລະຫວ່າງເວລາຂອງພາກພັນທະສັນຍາໃໝ່

- ແຄ້ວນຄາລີເລເປັ້ນຊາຍແດນດ້ານຕາວັນອອກຂອງທະເລສາບ


generated on Thu Jul 10 08:45:04 2025

ທີ່ເອີ້ນວ່າ"ທະເລຄາລີເລ."

- ພຣະເຢຊູ ໄດ້ເຕີບໃຫຍ່ແລະໄດ້ອາໃສຢູ່ໃນເມືອງນາຊາເຣັດ

ແຄ້ວນຄາລີເລ.

- ການອັດສະຈັນສ່ວນຫລາຍແລະການສັ່ງສອນຂອງພຣະເຢຊູ

ເກີດຂຶ້ນໃນແຄ້ວນຄາລີເລ.

## ຄາເດັດ

### ຂໍ້ເທັດຈິງ

ຄາເດັດແມ່ນເມືອງໜຶ່ງຂອງການາອານຊຶ່ງຖືກຍຶດຄອງໂດຍຄົນອິດສະຣາເອນ ເມື່ອພວກເຂົາໄດ້ເຂົ້າສູ່ແຜ່ນດິນການາອານ.

- ສະຖານທີ່ຕັ້ງຂອງເມືອງນີ້ແມ່ນຢູ່ທາງພາກຂອງອານາເຂດອິດສະຣາເອນ ໃນສ່ວນຂອງແຜ່ນດິນທີ່ໄດ້ຖືກມອບໃຫ້ແກ່ເຜົ່າ ນັບທາລີ.
- ເຄເດັດເປັນຫນຶ່ງໃນເມືອງທີ່ໄດ້ຮັບເລືອກໃຫ້ເປັນເມືອງທີ່ພວກປະໂລຫິດຊາວເລວີສາມາດອາໃສຢູ່ ເນື່ອງຈາກພວກເຂົາບໍ່ໄດ້ມີແຜ່ນດິນເປັນຂອງຕົນເອງ.
- ມັນເປັນເມືອງທີ່ຖືກແຍກອອກມາໃຫ້ເປັນ "ເມືອງລີໄພ".

## ຄາເດັດ, ຄາເດັດຍາເນຍ, ເມຣິບາຄາເດັດ

### ຂໍ້ເທັດຈິງ

ຊື່ຄາເດັດ, ຄາເດັດຍາເນຍ ທັງໝົດອ້າງເຖິງເມືອງທີ່ສໍາຄັນເມືອງໜຶ່ງໃນອິດສະຣາເອນເຊິ່ງຕັ້ງຢູ່ທາງພາກໃຕ້ຂອງອິດສະຣາເອນ ໃກ້ກັບເຂດແດນຂອງເມືອງເອໂດມ.

- ເມືອງຄາເດັດເປັນໂອເອຊິດ ຄືສະຖານທີ່ທີ່ມີນ້ໍາແລະດິນດີໃນໃຈກາງຂອງທະເລຊາຍຊື່ວ່າຊິນ.
- ໂມເຊສົ່ງຜູ້ສອດແນມສິບສອງຄົນເຂົ້າໄປໃນແຜ່ນດິນການາອານຈາກຄາເດັດຍາເນຍ.
- ອິດສະຣາເອນໄດ້ຕັ້ງຄ້າຍທີ່ຄາເດັດທີ່ເກີດມີການກັນດານອາຫານລະຫວ່າງການເດີນທາງໃນຖິ່ນທຸລະກັນດານ.
- ຄາເດັດຍາເນຍຄືສະຖານທີ່ ທີ່ມີຣຽມເສຍຊີວິດ.
- ທີ່ເມຣິບາຄາເດັດ ໂມເຊບໍ່ເຊື່ອຟັງພຣະເຈົ້າແລະໄດ້ຕີກ້ອນຫີນເຮັດໃຫ້ນ້ໍາໄຫລອອກມາສໍາລັບຊາວອິດສະຣາເອນໄດ້ດື່ມ ແທນທີ່ລາວຈະສັ່ງກ້ອນຫີນຕາມທີ່ພຣະເຈົ້າໄດ້ສັ່ງໃຫ້ລາວເຮັດ.
- ຊື່ "ຄາເດັດ" ມາຈາກພາສາເຮັບເຣີ ທີ່ມີຄວາມໝາຍວ່າ "ສັກສິດ" ຫລື "ແຍກອອກມາ".

## ຄໍາປະຕິຍານ

### ນິຍາມ

ຄໍາປະຕິຍານ ຄືຄໍາສັນຍາທີ່ບຸກຄົນຈະປະຕິບັດກັບພຣະເຈົ້າ.
ບຸກຄົນສັນຍາວ່າຈະເຮັດຫຍັງບາງຢ່າງເພື່ອເປັນການຖວາຍກຽດຢ່າງພິເສດແດ່ພຣະເຈົ້າຫລືເພື່ອສະແດງຄວາມຈິງຮັກພັກດີຕໍ່ພຣະອົງ.

- ຫຼັງຈາກທີ່ບຸກຄົນປະຕິຍານ, ເຂົາມີຂໍ້ຜູກມັດທີ່ຕ້ອງປະຕິບັດຕາມຄໍາປະຕິຍານນັ້ນ.
- ພຣະຄໍາພີສອນວ່າບຸກຄົນອາດຈະຖືກພິພາກສາໂດຍພຣະເຈົ້າ ຖ້າທ່ານບໍ່ປະຕິບັດຕາມຄໍາປະຕິຍານນັ້ນ.
- ບາງເທື່ອບຸກຄົນທູນຂໍໃຫ້ພຣະເຈົ້າຊົງປົກປ້ອງ ຫລືປະທານບາງຢ່າງເພື່ອແລກກັບການກໍາການປະຕິຍານຕົນ.
- ແຕ່ພຣະເຈົ້າບໍ່ຈໍາເປັນຕ້ອງເຮັດຕາມຄໍາຮ້ອງຂໍທີ່ບຸກຄົນຮ້ອງຂໍໃນຄໍາປະຕິຍານນັ້ນ.

% ຄໍາແນະນໍາໃນການແປ

- ຂຶ້ນຢູ່ກັບບໍລິບົດ, "ຄໍາປະຕິຍານ" ອາດແປວ່າ "ສັນຍາທີ່ຈິງຈັງ" ຫລື "ສັນຍາຕໍ່ພຣະເຈົ້າ."
- ຄໍານີ້ຄວນໄດ້ຮັບການແປແຕກຕ່າງຈາກ ຄໍາວ່າ "ຄໍາສາບານ."


generated on Thu Jul 10 08:45:04 2025

## ຄຳສັນຍາ

### ນິຍາມ

ຄຳສັນຍາຄື ຄຳປະຕິຍານເພື່ອເຮັດບາງຢ່າງ ເມື່ອມີຄົນສັນຍາບາງຢ່າງນັ້ນແປວ່າທ່ານກຳລັງໃຫ້ຄຳໝັ້ນສັນຍາທີ່ຈະເຮັດບາງສິ່ງບາງຢ່າງ

- ພະຄັມພີບັນທຶກພະສັນຍາຫຼາຍປະການທີ່ພະເຈົ້າໄດ້ຊົງກະທຳເພື່ອປະຊາກອນຂອງພະອົງ
- ຄຳສັນຍາເປັນສ່ວນສຳຄັນສ່ວນໜຶ່ງຂອງຂໍ້ຕົກລົງຢ່າງເປັນທາງການເຊັ່ນ ພັນທະສັນຍາ
- ຄຳສັນຍາຫລາຍເທື່ອມາພ້ອມກັບຄຳປະຕິຍານເພື່ອຢືນຢັນວ່າມັນຈະຕ້ອງເຮັດດັ່ງນັ້ນ

### ຄຳແນະນຳໃນການແປ

- ຄຳວ່າ "ສັນຍາ" ສາມາດແປວ່າ "ຄວາມມຸ້ງໝັ້ນ" ຫລື "ການໃຫ້ຄຳໝັ້ນໃຈ" ຫລື "ການຮັບປະກັນ"
- "ສັນຍາວ່າຈະເຮັດ" ສາມາດແປວ່າ "ຮັບປະກັນກັບບາງຄົນວ່າທ່ານຈະເຮັດບາງຢ່າງ" ຫລື "ມຸ້ງໝັ້ນທີ່ຈະເຮັດບາງຢ່າງ"

## ຄຳສັ່ງ, ສັ່ງ, ພຣະບັນຍັດ

### ນິຍາມ

ຄຳສັ່ງ "ສັ່ງ" ໝາຍເຖິງ ການສັ່ງໃຫ້ຄົນໃດຄົນໜຶ່ງເຮັດບາງສິ່ງ. "ຄຳສັ່ງ" ຫຼື" ພຣະບັນຍັດ" ເປັນສິ່ງທີ່ຄົນຖືກສັ່ງໃຫ້ທຳຕາມ.

- ເຖິງແມ່ນວ່າຄຳເຫຼົ່ານີ້ຈະມີພື້ນຖານຄວາມໝາຍຢ່າງດຽວກັນ, "ພຣະບັນຍັດ"
  ມັກຈະໝາຍເຖິງພຣະບັນຊາສະເພາະຂອງພຣະເຈົ້າທີ່ເປັນທາງການແລະຍັ່ງຍືນຖາວອນຫລາຍກວ່າ, ຢ່າງເຊັ່ນ
  "ພຣະບັນຍັດສິບປະການ."
- ພຣະບັນຍັດສາມາດຂຽນເປັນທາງບວກ ("ຈົ່ງໃຫ້ກຽດບິດາມານດາ") ຫຼື ທາງລົບ ("ຢ່າລັກ") ກໍໄດ້.
- "ຮັບຄຳສັ່ງ" ໝາຍເຖິງ "ຮັບໜ້າທີ່ຄວບຄຸມດູແລ" ຫຼື "ຮັບໜ້າທີ່ຜິດຊອບ" ຂອງບາງສິ່ງຫຼືບາງຄົນ.

### ຄຳແນະນຳໃນການແປ

- ການແປຄຳນີ ໃຫ້ດີທີ່ສຸດຄືການແປໃຫ້ແຕກຕ່າງຈາກຄຳວ່າ,

" ກິດໝາຍ." ຂໍໃຫ້ປຽບທຽບກັບຄຳຈຳກັດຄວາມຂອງຄຳວ່າ "ພຣະບັນຊາ" ແລະ "ລະບຽບ" ດ້ວຍ.

- ຜູ້ແປບາງຄົນອາດຈະແປ "ຄຳສັ່ງ" ແລະ "ພຣະບັນຍາດ" ທີ່ກ່າວເຖິງຄຳສັ່ງທີ່ຖາວອນແລະເປັນທາງການ, ທີ່ພຣະເຈົ້າຊົງໄດ້ບັນຊາ.
- ບາງຄົນມັກໃຊ້ຄຳສະເພາະຫຼາຍກວ່າສຳລັບ ພຣະບັນຍັດ ທີ່ກ່າວເຖິງຄຳສັ່ງທີ່ຖາວອນແລະເປັນທາງການທີ່ພຣະເຈົ້າຊົງໄດ້ບັນຊາ

## ຄຳອຸປະມາ

### ນິຍາມ

ຄຳວ່າ "ຄຳອຸປະມາ"
ໂດຍປົກກະຕິແລ້ວອ້າງເຖິງເລື່ອງສັ້ນຫຼືຍົດຮຽນເປົ້າໝາຍໃນຊີວິດປະຈຳວັນທີ່ໃຊ້ເປັນອະທິບາຍຫຼືສັ່ງສອນຄວາມຈິງດ້ານສິນລະທັມ.

- ພຣະເຢຊູຊົງໃຊ້ຄຳອຸປະມາເພື່ອສັ່ງສອນພວກສາວົກຂອງພຣະອົງ.
  ແມ່ນວ່າພຣະອົງຊົງໃຊ້ຄຳອຸປະມາເພື່ອສັ່ງສອນປະຊາຊົນເຊັ່ນດຽວກັນ,
  ແຕ່ພຣະອົງກໍບໍ່ໄດ້ອະທິບາຍເຖິງຄວາມໝາຍຂອງຄຳອຸປະມາສະເໝີໄປ
- ຄຳອຸປະມາສາມາດໃຊ້ເພື່ອເປີດເຜີຍຄວາມຈິງບາງຢ່າງຕໍ່ສາວົກຂອງພຣະອົງໄດ້ໃນຂະນະທີ່ເຊື່ອງຄວາມຈິງຈາກປະຊາຊົນເຊັ່ນພວກຟາລີຊາຍຜູ້ທີ່ເຊື່ອໃ
- ຜູ້ເຜີຍພຣະວັດຈະນະນາທານໄດ້ໃຊ້ຄຳອຸປະມາໜຶ່ງເພື່ອສະແດງໃຫ້ກະສັດເຫັນເຖິງບາບອັນຊົ່ວຮ້າຍຂອງທ່ານ.
- ເລື່ອງລາວຂອງຊາວສະມາເລຍໃຈດີເປັນຕົວຢ່າງຂອງຄຳອຸປະມາທີ່ເປັນເລື່ອງລາວ ການປຽບທຽບຂອງພຣະເຢຊູ
  ລະຫວ່າງຖົ່ວເຫລົ້າອ່ຳງຸ່ນເກົ່າແລະໃໝ່ນັ້ນ,ເປັນຕົວຢ່າງຂອງຄຳອຸປະມາທີ່ເປັນບົດຮຽນຈາກການໃຊ້ສິ່ງຂອງເພື່ອຊ່ວຍໃຫ້ສາວົກເຂົ້າໃຈຄຳສອນຂອງພຣະ


generated on Thu Jul 10 08:45:04 2025

## ຄິດຄ້ຳຄວນ

### ນິຍຳມ

ຄຳວ່ຳ "ຄິດຄ້ຳຄວນ" ໝຳຍເຖິງກຳນໃຊ້ເວລຳຄິດກ່ຽວກັບບຳງສິ່ງບຳງຢ່ຳງ ດ້ວຍຄວຳມຮອບຄອບແລະເລິກເຊິ່ງ.

- ຄຳນີ້ຖືກໃຊ້ເລື້ອຍໆ ໃນພຣະຄັມພີ ເພື່ອໃຫ້ຄິດເຖິງກ່ຽວກັບພຣະເຈົ້ຳ ແລະຄຳສັ່ງສອນຂອງພຣະອົງ.
- ເພງສັນລະເສີນ ບົດທີ 1 ບອກວ່ຳ ຜູ້ທີ່ພຳວັນນຳພຣະຄັມຂອງພຣະເຈົ້ຳ "ທັ້ງກຳງເວັນແລະກຳງຄືນ" ຈະໄດ້ຮັບພຣະພອນທີ່ຍິ່ງໃຫຍ່.

### ຄຳແນະນຳໃນກຳນແປ

- ກຳນ "ຄິດຄ້ຳຄວນ" ຍັງສຳມຳດແປໄດ້ອີກວ່ຳ "ຄິດດ້ວຍຄວຳມລະມັດລະວັງແລະເລິກເຊິ່ງ" ຫລື "ພິຈຳລະນຳຢ່ຳງຖີ່ຖ້ວນ" ຫລື "ຄິດເຖິງຢູ່ເລື້ອຍໆ."
- ລັກສະນະຂອງຄຳນຳມແມ່ນ "ກຳນຄິດຄ້ຳຄວນ" ແລະຍັງສຳມຳດແປໄດ້ອີກວ່ຳ, "ຄິດໃຫ້ເລິກໆ." ປະໂຫຍກທີ່ບອກວ່ຳ "ກຳນຄິດຄ້ຳຄວນດ້ວຍໜ້ຳໃຈຂອງຂ້ອຍ" ສຳມຳດແປໄດ້ອີກວ່ຳ "ຂ້ອຍຄິດເຖິງມັນດ້ວຍຄວຳມເລິກເຊິ່ງ" ຫລື "ຂ້ອຍຄິດເຖິງສິ່ງນັ້ນເລື້ອຍໆ."

## ຄ້ຶງກຳງແຂນ

### ນິຍຳມ

ຄຳວ່ຳ "ຄ້ຶງກຳງແຂນ"ໝຳຍເຖິງກຳນປະຫຳນບຸກຄົນ ດ້ວຍກຳນຜູກມັດເຂົ ຳໄວ້ກັບໄມ້ກຳງແຂນແລະປ່ອຍໃຫ້ເຂົ ຳຢູ່ທີ່ນັ້ນເພື່ອຈະທົນທຸກທໍ ຣະມຳນແລະຕຳຍດ້ວຍຄວຳມເຈັບປວດຢ່ຳງຍິ່ງ.

- ຜູ້ເຄຳະຮ້ຳຍຖືກມັດຫຼື ຕອກຕະປູຕິດກັບໄມ້ກຳງແຂນ ຄົນທີ່ຖືກຄ້ຶງກຳງແຂນເສຍຊີວິດຈຳກກຳນເສຍເລືອດຫຼືຈຳກກຳນຫຳຍໃຈບໍ່ອອກ.
- ຈັກກະພັດໂຣມບູຮຳນໃຊ້ວິທີນີ້ໃນກຳນລົງໂທດແລະຂ້ຳຄົນທີ່ເປັນອຳດຊະຍຳກອນຫຼືຜູ້ກໍ ຳກະບົດຕໍ່ຕ້ຳນອໍ ຳນຳດລັດຖະບຳນຂອງພວກເຂົ ຳ.
- ພວກຜູ້ນຳສຳດສະໝຳຍິວໄດ້ຂໍ ໃຫ້ຜູ້ວ່ຳຣຳຊະກຳນໂຣມສັ່ງໃຫ້ທະຫຳນຂອງເຂົ ຳຄ້ຶງພຣະເຢຊູ
  ພວກທະຫຳນໄດ້ຕອກຕະປູໃສ່ມືພຣະເຢຊູເຂົ ຳກັບໄມ້ກຳງແຂນ.
  ພຣະອົງຊົງທົນທຸກທໍ ຣະມຳນຢູ່ທີ່ນັ້ນເປັ ນເວລຳຫົກຊົ ວໂມງແລ້ວກໍ ສິ້ນພຣະຊົນ.

### ຄຳແນະນຳໃນກຳນແປ

- ຄຳວ່ຳ"ຄ້ຶງທີ່ກຳງແຂນ"ອຳດແປວ່ຳ "ຂ້ຳເທິງໄມ້ກຳງແຂນ" ຫຼື

"ປະຫຳນໂດຍກຳນຕອກຕະປູເຂົ ຳກັບໄມ້ກຳງແຂນ.

## ຄືກັນ, ຄ້ຳຍຄືກັນ

### ນິຍຳມ

ຄຳວ່ຳ " ຄືກັນ " ແລະ " ຄວຳມຄ້ຳຍຄືກັນ " ອ້ຳງອີງເຖິງບຳງສິ່ງທີ່ຄືກັນ ຫລືຄ້ຳຍຄືກັນກັບບຳງສິ່ງບຳງຢ່ຳງ

- ຄຳວ່ຳ " ຄືກັນ " ສ່ວນຫລຳຍມັກຈະໃຊ້ໃນກຳນກ່ຳວເປັ ນຄຳອຸປະມຳທີ່ເອີ ນວ່ຳ " ຄຳອຸປະມຳ "
  ເຊິ່ງບຳງຢ່ຳງຖືກປຽບທຽບກັບອີກຢ່ຳງຫນຶ ງ ໂດຍປົກກະຕິຈະສະແດງເຖິງລັກສະນະຕົວຢ່ຳງເຊັ ່ນ " ຄຳອຸປະມຳ "
  ເຄືອງໝຸ່ງຂອງເຂົ ຳສ່ອງປະກຳຍຄືກັບດວງຕຳເວັ ນ ແລະ ສຽງດັ ງຄືກັບຟ້ຳຜ່ຳ
- ເປັ ນຄືກັນ " ຫລື " ສຽງຄືກັນ " ຫລື " ຄືກັນ " ບຳງຢ່ຳງຫລືບຳງຄົນຫມຳຍເຖິ ງ ມີຄຸນນະພຳບທີ່ຄ້ຳຍຄືກັນກັບສິ່ງຂອງ ຫລື
  ບຸກຄົນທີ່ກ ຳລັ ງປຽບທຽບ.
- ຄົນຖືກເນລະມິດສ້ຳງຂຶ ້ນມຳ ໃນ " ຄວຳມຄ້ຳຍຄືກັນ " ຂອງພຣະເຈົ້ຳ ນັ ນຄື ໃນ " ພຣະສຳຍຳ "
  ຂອງພຣະອົງນີ້ຫມຳຍຄວຳມວ່ຳພວກເຂົ ຳມີຄຸນນະພຳບ ຫລື ຄຸນລັກສະນະ " ຄືກັນ " ຫລື " ຄ້ຳຍຄືກັນ "
  ກັບຄຸນນະພຳບທີ່ພຣະເຈົ້ຳຊົ ງມີຢູ່ ຢ່ຳງເຊັ ່ນຄວຳມສຳມຳດໃນກຳນຄິດ ຮູ້ສຶກ ແລະ ສື ສຳນ.
- ກຳນມີ " ຄວຳມຄ້ຳຍຄືກັນ " ກັ ບບຳງສິ່ງບຳງຄວຳມຫມຳຍຄຳວ່ຳມີບຸກຄະລິກ ລັກສະນະທີ່ຄືກັນກັບສິ່ງທີ່ບຸກຄົ ນນັ ້ນ.

### ຄຳແນະນຳໃນກຳນແປ

- ໃນຍຸ ງບົດ ຄຳກ່ຳວວ່ຳ " ໃນກຳນຄ້ຳຍຄືກັ ນ " ສຳມຳດແປວ່ຳ " ສິ່ງໃດທີ່ຄ້ຳຍຄືກັ ນ " ຫລື " ຫລືບຳງສິ່ງທີ່ປະກົ ດອອກມຳເປັ ນ. "


generated on Thu Jul 10 08:45:04 2025

- ຄຳວ່າ " ໃນຄວາມຄ້າຍຄືການຕາຍຂອງພຣະອົງ " ສາມາດແປວ່າ " ມີປະສົບການຮ່ວມໃນການຕາຍຂອງພຣະອົງ " ຫລື " ສຳກັບການມີປະສົບການໃນການຕາຍຮ່ວມກັບພຣະອົງ. "
- ຄຳກ່າວ " ໃນການເປັນຄືກັບເນື້ອໜັງທີ່ມີບາບ " ສາມາດແປວ່າ " ເປັນຄືກັນກັບຄົນບາບຄົນໜຶ່ງ " ຫລື " ເປັນມະນຸດຄົນໜຶ່ງ " ຈົ່ງໃຫ້ແນ່ໃຈວ່າການແປຄຳນີ້ບໍ່ໄດ້ແປວ່າພຣະເຢຊູຊົ່ງເປັນຄົນບາບ " ໃນການເປັນຄືກັນກັບພວກເຂົາ " ສາມາດແປວ່າ " ເປັນຄືເຂົາ " ຫລື " ມີຫລາຍສິ່ງທີ່ມີຄຸນສົມບັດທີ່ເຂົາມີ. "
- ຄຳກ່າວ " ການເປັນຄືກັນໃນພາບລັກຂອງຄົນທີ່ເປື່ອຍເນົ່າ ຂອງນົກ ສັດປ່າສີຕີນ ແລະ ສິ່ງຕ່າງໆທີ່ເລືອຄານ " ສາມາດແປວ່າ " ຮູບເຄົ່າລົບຖືກສ້າງຂຶ້ນເຮັດໃຫ້ເປັນຄ້າຍຄືກັບມະນຸດທີ່ເປື່ອຍເນົ່າ ຫລື ສັດເຊັ່ນ ນົກ ສັດປາ ສັດໂຕນ້ອຍ ແລະ ສິ່ງທີ່ເລືອຄານຕ່າງໆ. "

## ຄືນດີ, ການຄືນດີ

### ນິຍາມ

ຄຳວ່າ "ຄືນດີ" ແລະ "ການຄືນດີ" ອ້າງເຖິງ "ການສ້າງສັນຕິພາບ" ລະຫວ່າງຄົນທີ່ເຄີຍເປັນສັດຕູກັນມາກ່ອນ.

- ໃນພຣະຄັມພີ ຄຳນີ້ມັກອ້າງເຖິງ
  ການທີ່ພຣະເຈົ້າໃຫ້ຄົນຄືນດີກັບພຣະອົງຜ່ານການຖວາຍບູຊາຂອງພຣະເຢຊູຄຣິດ,ພຣະບຸດຂອງພຣະອົງ.
- ເພາະວ່າຄວາມບາບ
  ທຸກຄົນຈຶ່ງເປັນສັດຕູຂອງພຣະເຈົ້າ.ເພາະດ້ວຍຄວາມຮັກທີ່ປ່ຽມລົ້ນດ້ວຍພຣະເມດຕາຂອງພຣະອົງ,ພຣະເຈົ້າໄດ້ຈັດຕຽມຫົນທາງສຳລັບຄົນທັ້ງຫຼາຍເພື
- ຜ່ານການເຊື່ອໄວ້ວາງໃຈໃນການຖວາຍບູຊາຂອງພຣະເຢຊູເພື່ອເປັນການຈ່າຍຄ່າຄວາມບາບຂອງພວກເຂົາ,
  ຄົນທັ້ງຫຼາຍສາມາດໄດ້ຮັບການອະໄພຍແລະມີສັນຕິກັບພຣະອົງ.

### ຄຳແນະນຳໃນການແປ

- ຄຳວ່າ "ຄືນດີ" ສາມາດແປວ່າ "ທຳສັນຕິພາບ" ຫຼື "ນຳຄວາມສຳພັນອັນດີກັບຄືນມາ" ຫຼື "ສ້າງສັນຕິ" ຫຼື "ທຳໃຫ້ເປັນເພື່ອນກັນ."
- ຄຳວ່າ "ການຄືນດີກັນ" ສາມາດແປວ່າ "ນຳເອົາຄວາມສຳພັນອັນດີກັບຄືນມາ" ຫຼື "ສ້າງສັນຕິ" ຫຼື
  "ທຳໃຫ້ເກີດຄວາມສຳພັນຢ່າງສັນຕິ."

## ຄຸກ, ນັກໂທດ, ຄົນທີ່ຖືກຂັງ

### ນິຍາມ

ຄຳວ່າ "ຄຸກ" ໝາຍເຖິງສະຖານທີ່ເຫຼົ່າອາດຊະຍາກອນຖືກກັກໄວ້ເພື່ອເປັນການລົງໂທດເພາະອາດຊະຍາກັມຂອງພວກເຂົາ "ນັກໂທດ" ຄືຄົນທີ່ຖືກຂັງໄວ້ໃນຄຸກ

- ບຸກຄົນອາດຖືກຂັງໄວ້ໃນຄຸກໃນຂະນະທີ່ລໍການຕັດສິນໃນຄະດີ
- ຄຳວ່າ "ຈຳຄຸກ" ໝາຍເຖິງ "ຂັງໄວ້ໃນຄຸກ" ຫລື "ຂັງໄວ້ເປັນຊະເລີຍ"
- ຜູ້ປະກາດພະທຳຫຼາຍຄົນແລະຜູ້ຮັບໃຊ້ພະເຈົ້າຫຼາຍຄົນກໍໂດນຂັງໃນຄຸກເຖິງວ່າພວກທ່ານຈະບໍ່ໄດ້ເຮັດສິ່ງໃດຜິດກໍຕາມ

### ຄຳແນະນຳໃນການແປ

- ອີກຄຳໜຶ່ງຂອງຄຳວ່າ "ຄຸກ" ຫລື "ທີ່ກັກຂັງ"
- ຄຳນີ້ສາມາດແປວ່າ "ຄຸກໃຕ້ດິນ" ໃນກໍລະນີທີ່ຄຸກຢູ່ໃຕ້ດິນຫລືໃຕ້ປຣາສາດຫລືອາຄານອື່ນໆ
- ຄຳວ່າ "ພວກນັກໂທດ"
  ສາມາດອ້າງເຖິງໂດຍກົ່ວໄປຄືປະຊາຊົນທີ່ຖືກຈັບເປັນຊະເລີຍໂດຍສັດຕູແລະຖືກຂັງໄວ້ໃນບາງແຫ່ງທີ່ພວກເຂົາຕ້ອງການ
  ວິທີອື່ນທີ່ແປຄວາມຫມາຍນີ້ຄື "ຖືກຈັບເປັນຊະເລີຍ"
- ວິທີອື່ນທີ່ແປ "ຖືກຂັງຄຸກ" ສາມາດແປວ່າ "ຖືກເກັບໄວ້ໃນຖານະນັກໂທດ" ຫລື "ຖືກເກັບໄວ້ເປັນຊະເລີຍ" ຫລື "ຕົກເປັນຊະເລີຍ"

## ຄຸນນະສົມບັດ, ມີຄຸນນະສົມບັດ

### ນິຍາມ

ຄຸນນະສົມບັດ ຄືການອ້າງເຖິງສິດທີ່ຈະໄດ້ຮັບຜົນປະໂຫຍດບາງຢ່າງຫຼືການໄດ້ຮັບສິດບາງຢ່າງ.

- ບຸກຄົນມີຄຸນນະສົມບັດທີ່ຖືກເລືອກ ສຳລັບງານນີ້ຕ້ອງເປັນບຸກຄົນທີ່ຜ່ານການຝຶກຝົນແລະຜ່ານການອົບຮົມສຳລັບງານ.


generated on Thu Jul 10 08:45:04 2025

- ເນື່ອໃນຈົດໝາຍເວົ້າເຖິງຄຣິສຕະຈັກໂກໂລຊາຍ, ອັກຄະສາວົກ ໂປໂລໄດ້ຂຽນວ່າ ພຣະເຈົ້າພຣະບິດາໄດ້ຖືວ່າທຸກຄົນທີ່ເຊື່ອແມ່ນມີຄຸນນະສົມບັດຄວາມພ້ອມ ໃນການມີສ່ວນຮ່ວມໃນລາດສະອານາຈັກຂອງຄວາມສະວ່າງຂອງພຣະອົງ ນີ້ໝາຍຄວາມວ່າ ພ ຣະເຈົ້າປະທານທຸກຢ່າງທີ່ຈຳເປັນສຳລັບຄົນຊອບທຳ.

- ຜູ້ທີ່ເຊື່ອບໍ່ສາມາດໄດ້ຮັບຊີດ ໃຫ້ເປັນສ່ວນນຶ່ງໃນແຜ່ນດິນຂອງພຣະເຈົ້າ ໂດຍການທຳດີຂອງເຂົາແຕ່ເຂົາໄດ້ຮັບສິດນີເພາະພຣະເຈົ້າໄດ້ໄຖ່ເຂົາດ້ວຍພຣະໂລຫິດຂອງອົງພຣະຄຣິດ.

  % ແນະນຳໃນການແປ

- ຄຳວ່າ ຄຸນນະສົມບັດ ອາດໝາຍຄວາມວ່າ ຄວາມຊຳນານຫຼືຄວາມສາມາດ ຂຶ້ນຢູ່ກັບປະໂຍກນັ້ນໆ.

- ຄຳວ່າ ຄຸນນະສົມບັດ ບາງຄົນອາດຈະແປວ່າ: ຕຽມພ້ອມ, ຫຼື ສາມາດ ຫຼືມີພະລັງ.

ເບິ່ງເພີ່ມເຕີມ: Colossae, godly, kingdom, light, Paul, redeem)

## ຄູ, ອາຈານ

### ນິຍາມ

ຄູ ເປັນບຸກຄົນຜູ້ໃຫ້ຄຳໃໝ່ໆໃຫ້ກັບຜູ້ຄົນ ຄູຊ່ອຍໃຫ້ຜູ້ອື່ນໄດ້ຮັບຄວາມຮູ້ແລະທັກສະໃໝ່ນຳ.

- ໃນພຣະຄຳພີຄຳວ່າ"ຄູ" ຈະໃຊ້ໃນຄວາມໝາຍພິເສດກ່ຽວກັບຄົນທີ່ສອນເລື່ອງລາວຂອງພຣະເຈົ້າ ບໍ່ໄດ້ໝາຍເຖິງຄູທີ່ສອນໃນໂຮງຮຽນ.
- ປະຊາຊົນທີ່ຮຽນຈາກຄູຈະເອີ້ນວ່າ "ສິດ" ຫຼື"ສາວົກ"
- ໃນຄຳແປຂອງພຣະຄຳພີບາງສະບັບ ຄຳສັບຈະໃຊ້ຕົວໜັງສືໃຫຍ່("ພຣະອາຈານ")ເມື່ອໃຊ້ເປັນຕຳແໜ່ງຂອງພຣະເຢຊູເຈົ້າ.

### ຄຳແນະນຳໃນການແປ

- ຄຳຫໍາມະດາຂອງຄູສາມາດແປໄດ້ວ່າ, ນອກຈາກນີ້ຄຳນັ້ນໃຊ້ກັບຄູໃນໂຮງຮຽນ.
- ບາງວັດທະນະທຳອາດຈະໃຊ້ພິເສດສຳຫລັບຄູສາດສະໜາ ເຊ່ນ "ເຊີ" ຫຼື "ຣັບບີ"ຫຼື "ນັກເທດສະໜາ".

## ຄົນຂີ້ມ້າ

### ນິຍາມ

ໃນສະໄໝພຣະຄຳພີ, ຄຳວ່າ "ຄົນຂີ້ມ້າ" ອ້າງເຖິງພວກຜູ້ຊາຍທີ່ຂີ້ມ້າໄປໃນການສູ້ຮົບ.

- ນັກຮົບທີ່ບັງຄັບມ້າຖືກໃຊ້ໃນການລາກລົດມ້າກໍ່ຖືກເອີ້ນວ່າ, "ຄົນຂີ້ມ້າ," ເຖິງແມ່ນວ່າຄຳນີ້ໂດຍປົກກະຕິອ້າງເຖິງຜູ້ຊາຍທີ່ຂີ້ມ້າ.
- ພວກອິດສະຣາເອນເຊື່ອວ່າການໃຊ້ມ້າໃນການສູ້ຮົບເປັນທຳນຽມປະຕິບັດຂອງຄົນນອກສາສະໜາ, ທີ່ເນັ້ນຄວາມສຳຄັນໃນເລື່ອງຂອງພະລັງອຳນາດໃນໄຊຊະນະຫລາຍກວ່າພຣະຢາເວ.
- ຄຳນີ້ສາມາດແປວ່າ, "ຄົນຂີ້ມ້າ" ຫລື "ຄົນເທິງຫລັງມ້າ."

## ຄົນຕ່າງຊາດ

### ນິຍາມ

ຄຳວ່າ "ຄົນຕ່າງຊາດ" ອ້າງເຖິງຄົນທີ່ບໍ່ໄດ້ເປັນຍິວ ຄົນຕ່າງຊາດຄືປະຊາຊົນຜູ້ທີ່ບໍ່ໄດ້ສືບເຊື້ອສາຍມາຈາກຢາໂຄບ.

- ໃນພຣະຄັມພີ, ຄຳວ່າ "ພວກທີ່ບໍ່ໄດ້ເຂົ້າຮັບພິທີຕັດ"ກໍໃຊ້ຄືກັນກັບຄຳອຸປະມາອ້າງເຖິງຄົນຕ່າງຊາດເພາະວ່າພວກເຂົາຫລາຍຄົນບໍ່ໄດ້ໃຫ້ລູກຫລານທີ່ເປັນຜູ້ຊາຍເຂົ້າຮັບພິທີຕັດ
- ເພາະວ່າພຣະເຈົ້າໄດ້ເລືອກຄົນຍິວເພື່ອເປັນຊົນຊາດທີ່ພິເສດສຳລັບພຣະເຈົ້າ. ພວກເຂົາໄດ້ຄິດວ່າພວກຄົນຕ່າງຊາດຄືພວກຄົນນອກທີ່ບໍ່ມີວັນຈະໄດ້ເປັນຄົນຂອງພຣະເຈົ້າ.
- ຄົນຍິວຫລືທີ່ເອີ້ນວ່າຊົນຊາດອິສະຣາເອນຫລືຄົນເຮັບເຣີໃນຊ່ວງເວລາທີ່ແຕກຕ່າງຂອງປະຫວັດສາດ ພວກເຂົາອ້າງເຖິງຄົນອື່ນໆ ທີ່ເຫລືອເປັນ"ຄົນຕ່າງຊາດ."
- ຄົນຕ່າງຊາດສາມາດແປໄດ້ອີກວ່າ"ຄົນບໍ່ແມ່ນຄົນຍິວ" ຫລື " "ບໍ່ແມ່ນຄົນອິສະຣາເອນ" (ພັນທະສັນຍາເດີມ) ຫລື"ບໍ່ແມ່ນຄົນຍິວ"


generated on Thu Jul 10 08:45:04 2025

- ຕາມປະເພນີແລ້ວ ຄົນຍິວຈະບໍ່ກິນເຂົ້າຮ່ວມກັບຄົນຕ່າງຊາດຫລືຄົບຄ້າສາມາຄົມກັບພວກເຂົາ
  ຊຶ່ງໃນຕອນທຳອິດເຮັດໃຫ້ເກີດບັນຫາຫລວງຫລາຍໃນຄຣິສຕະຈັກຍຸກຕົ້ນໆ.

## ຄົນຕ່າງຊາດ,ຕ່າງຊາດ, ຄົນຕ່າງດ້າວ

### ນິຍາມ

ຄຳວ່າ "ຄົນຕ່າງຊາດ" ອ້າງເຖິງຄົນທີ່ບໍ່ໄດ້ອາໃສຢູ່ໃນປະເທດຂອງຕົນເອງ.ອີກຊື່ນຶ່ງຂອງຄົນຕ່າງຊາດຄື "ຄົນຕ່າງດ້າວ".

- ໃນພັນທະສັນຍາເດີມນັ້ນ ຄຳນີ້ກ່າວເຖິງໂດຍສະເພາະໃຜກໍຕາມທີ່ມາຈາກກຸ່ມຄົນທີ່ແຕກຕ່າງກັບກຸ່ມທີ່ເຂົາອາໃສຢູ່ດ້ວຍ.
- ຄົນຕ່າງຊາດຍັງເປັນຄົນທີ່ມີພາສາແລະວັດທະນະທັມທີ່ແຕກຕ່າງຈາກຄົນຂອງທ່ານເອງ.
- ຕົວຢ່າງເຊັ່ນ, ເມື່ອນາງນາໂອມີ
  ແລະຄອບຄົວຂອງນາງໄດ້ອົບພະຍົບໄປຍັງໂມອາບ,ພວກເຂົາຄືຄົນຕ່າງຊາດທີ່ນັ້ນ.ຕໍ່ມາເມື່ອນາງນາໂອມີແລະນາງຣຸດ
  ລູກສະໄພ້ໄດ້ຍ້າຍກັບມາອິສະຣາເອນ,ນາງຣຸດຖືກເອີ້ນວ່າ "ຄົນຕ່າງຊາດ" ທີ່ນັ້ນເພາະນາງບໍ່ໄດ້ມາຈາກອິສະຣາເອນ.
- ອັກຄະທູດໂປໂລໄດ້ບອກຊາວເອເຟໂຊວ່າ ກ່ອນທີ່ພວກເຂົາຈະຮູ້ຈັກພຣະຄຣິດ, ພວກເຂົາເປັນ "ຄົນຕ່າງຊາດ" ກໍແປວ່າ
  "ຄົນແປກໜ້າ" ແຕ່ບໍ່ຄວນກ່າວເຖິງບາງຄົນທີ່ບໍ່ຄຸ້ນເຄີຍຫຼືບໍ່ຮູ້ຈັກ.

## ຄົນອາໂມຣິດ

### ຂ້ເທັດຈິງ

ຄົນ ອາໂມຣິດ ເປັນກຸ່ມຄົນທີ່ມີອຳນາດຫຼາຍ ພວກເຂົາສືບເຊື້ອສາຍມາຈາກ ການາອານ ຊຶ່ງເປັນຫຼານຊາຍຂອງໂນອາ.

- ຊື່ຂອງພວກເຂົາມີຄວາມໝາຍວ່າ "ຜູ້ທີ່ຢູ່ສູງ" ຊຶ່ງອາດໝາຍເຖິງພື້ນທີ່ພູເຂົາທີ່ພວກເຂົາອາໃສຢູ່
  ຫຼືເປັນຂ້ຄວາມຈິງທີ່ວ່າພວກເຂົາເປັນທີ່ຮູ້ຈັກກັນດີໃນເລື່ອງຄວາມເປັນຄົນຕົວສູງ.
- ຄົນອາໂມຣິດອາໃສຢູ່ໃນພື້ນທີ່ທັ້ງສອງຝັ່ງຂອງແມ່ນ້ຳຈໍແດນ ເມືອງໄອ ຄືທີ່ອາໃສຂອງຄົນອາໂມຣິດ.
- ພຣະເຈົ້າໄດ້ເວົ້າເຖິງ "ຄວາມບາບຂອງຄົນອາໂມຣິດ"
  ຊຶ່ງໝາຍເຖິງການທີ່ພວກເຂົາບູຊາພຣະປອມແລະການກະທຳຜິດບາບລວມຢູ່ດ້ວຍ.
- ໂຢຊວຍ ໄດ້ພາພວກຄົນອິສະຣາເອນບຸກໄປທຳລາຍຄົນອາໂມຣິດ ຕາມທີ່ພຣະເຈົ້າໄດ້ຊົງບັນຊາໃຫ້ທຳ.

## ຄົນຮັກ

### ນິຍາມ

ຄຳວ່າ" ຄົນຮັກ " ມີຄວາມໝ!ยตามตัวอักสอนคื " บุกคົนผู้ที่ຮັກ " ໂດຍປົກກະຕິຄຳນີ້ໝາຍເຖິງຄົນທີ່ມີຄວາມສຳພັນທາງເພດຕໍ່ກັນ

- ເມື່ອຄຳວ່າ " ຄົນຮັກ " ທີ່ຖືກໃຊ້ໃນພີ້ະຄຳພີ
  ປົກກະຕິຈະອ້າງເຖິງບຸກຄົນຜູ້ທີ່ເຊີ່ງມີຄວາມສຳພັນທາງເພດກັບບາງຄົນທີ່ເຂົາບໍ່ໄດ້ແຕ່ງດ້ວຍ
- ຄວາມສຳພັນທາງເພດທີ່ຜິດນັ້ນມັກຈະໃຊ້ໃນພຣະຄຳພີອ້າງເຖິງການບໍ່ເຊື່ອຟັງພຣະເຈົ້າຂອງຄົນອິດສເອນໃນການນະມັດສະການຮູບເຂົາລົບທັ້ງຫຼາຍ
  ດັ່ງນັ້ນຄຳວ່າ " ເຫລົ້າຄົນຮັກ " ຈຶ່ງໃຊ້ໃນເຊີ່ງຄຳອຸປະມາເຖິ່ງພວກຮູບເຂົາລົບທີ່ຄົນອິດສເອນໄດ້ນະມັດສະການ
  ໃນສະພາບການເຫລົ້ານັ້ນ ຄຳນີ້ສາມາດແປໄດ້ວ່າ " ຄູ່ນອນທີ່ຜິດສິນລະທຳ " ຫຼື " ຄູ່ນອນທີ່ລ່ວງປະເພນີ " ຫຼື " ຮີບເຄົ້າລົບ
  " ( ດູຄຳອຸປະມາ )
- ຄົນຮັກ " ເງິນຄືໃຜບາງຄົນທີ່ໃຫ້ຄວາມສຳຄັນຫຼາຍເກີນໄປກັບການໄດ້ເງິນ ແລະ ເປັນເສດຖີ
- ໃນພັນທະສັນຍາເດີມ ບົດເພງໂຊໂລມອນ ໃຊ້ຄຳວ່ຳ " ຄົນຮັກ " ໃຊ້ໃນຄວາມໝາຍດ້ານບວກ

## ຄົນເກັບພາສີ

### ນິຍາມ

“ ຜູ້ເກັບພາສີ” ແມ່ນພະນັກງານຂອງລັດຖະບານທີ່ມີໜ້າທີ່ຮັບເງິນທີ່ປະຊາຊົນຈຳເປັນຕ້ອງຈ່າຍໃຫ້ລັດຖະບານເປັນພາສີ.

- ໃນສະ ໄໝຂອງພຣະເຢຊູແລະອັກຄະສາວົກ, ລັດຖະບານໂຣມໄດ້ຮຽກເກັບພາສີຈາກທຸກຄົນທີ່ອາໄສຢູ່ໃນອານາຈັກໂຣມ,
  ລວມທັ້ງຊາວຢິວ.
- ຄົນທີ່ເກັບພາສີສຳລັບລັດຖະບານໂຣມມັກຈະຕ້ອງການເງິນຈາກປະຊາຊົນຫຼາຍກວ່າທີ່ລັດຖະບານຕ້ອງການ.
  ຄົນເກັບພາສີຈະເກັບຮັກສາໄວ້ຈຳນວນເງິນເພີ່ມໃຫ້ຕົວເອງ.


generated on Thu Jul 10 08:45:04 2025

- ເພາະຄົນເກັບພາສີໄດ້ຫລອກລວງປະຊາຊົນໃນການເກັບພາສີ
  ຄົນຍິວຈຶ່ງພິຈາລະນາຄົນເກັບພາສີເປັນຄົນຊົ່ວທີ່ສຸດໃນຈຳພວກຂອງຄົນຍາຍ.
- ຊາວຍິວຍັງຖືວ່າຄົນເກັບພາສີຊາວຍິວເປັນຄົນທໍລະຍົດຕໍ່ປະຊາຊົນຂອງພວກເຂົາເພາະວ່າພວກເຂົາເຮັດວຽກໃຫ້ລັດຖະບານໂຣມເຊິ່ງກົດຂີ່ຂົ່ມເຫັງຊາວຍິ
- ປະໂຫຍກທີ່ວ່າ, "ຄົນເກັບພາສີແລະຄົນບາບ" ແມ່ນການສະແດງອອກທົ່ວໄປໃນພຣະຄຳພີໃໝ່,
  ສະແດງໃຫ້ເຫັນວ່າຊາວຍິວກຽດຊັງຄົນເກັບພາສີຫລາຍປານໃດ.

## ຄົນເຫືອຍ

### ນິຍາມ

ຕາມປົກກະຕິແລ້ວຄຳວ່າ "ຄົນເຫືອຍ" ແມ່ນເວົ້າເຖິງຜູ້ຊາຍທີ່ໄດ້ຮັບການຕອນແລ້ວ.
ຄຳສັບນີ້ຕໍ່ມາການເປັນຄຳເວົ້າທົ່ວໄປທີ່ເວົ້າເຖິງເຈົ້າໜ້າທີ່ຂອງລັດຖະບານຄົນໃດຄົນໜຶ່ງ,
ແມ່ນແຕ່ຜູ້ທີ່ບໍ່ໄດ້ຮັບການຕອນກໍຖືກເອີ້ນດ້ວຍຄຳນີ້ຄືກັນ.

- ພຣະເຢຊູໄດ້ກ່າວວ່າຄົນເຫືອຍບາງຄົນເກີດມາໃນລັກສະນະນີ້, ລາງເທື່ອອາດຈະເປັນຍ້ອນວ່າອະໄວຍະວະເພດຖືກທຳລາຍ
  ຫລືເປັນຍ້ອນວ່າບໍ່ສາມາດຮ່ວມເພດສຳພັນໄດ້. ມີຫລາຍຄົນເລືອກທີ່ຈະມີຊີວິດແບບຄົນເຫືອຍໂດຍມີຊີວິດທີ່ຖືວ່າເປັນພົມມະຈາລີ.
- ໃນສະໄໝບູຮານ, ຄົນເຫືອຍມັກເປັນຂ້າຣາຊການຂອງກະສັດທີ່ຖືກແຕ່ງຕັ້ງໃຫ້ເປັນຜູ້ຄຸ້ມຄອງສະຖານທີ່ຂອງພວກຜູ້ຍິງ.
- ຄົນເຫືອຍບາງຄົນເປັນຂ້າຣາຊການທີ່ສຳຄັນ, ເຊັ່ນຄົນເຫືອຍຊາວເອທິໂອເປຍຜູ້ທີ່ໄດ້ພົບກັບອັກຄະສາວົກຟີລິບທີ່ທະເລຊາຍ.

## ຄົນເພີຣິຊີດ

### ຂໍ້ເທັດຈິງ

ຄົນເພີຣິຊີດຄືໜຶ່ງໃນກຸ່ມຊົນຊາດທີ່ອາໄສຢູ່ໃນດິນແດນຄານາອານ
ມີຂໍ້ມູນພຽງນ້ອຍດຽວກ່ຽວກັບຊົນກຸ່ມນີ້ວ່າບັນພະບຸລຸດຂອງພວກທ່ານຄືໃຜແລະພວກທ່ານອາໄສຢູ່ສ່ວນໃດຂອງດິນແດນການານອານ

- ຄົນເພີຣິຊີດໄດ້ຖືກກ່າວເຖິງເລີຍໆໃນພັນທະສັນຍາເດີມພຣະທຳພວກຜູ້ປົກຄອງທີ່ໄດ້ບັນທຶກໄວ້ວ່າມີການແຕ່ງງານຂ້າມເຜົ່າພັນລະຫວ່າງຄົນເພີຣິຊີດແລະ
  ເຊີ່ງພາຍຫຼັງໄດ້ນຳໄປສູ່ການນະມັດສະການພະຫຽມທັ້ງຫຼາຍ
- ໝາຍເຫດ ຄົນໃນເຜົ່າເປເລດຈະເອີ້ນວ່າ "ຄົນເພີຣິຊີດ"
  ຊຶ່ງແຕກຕ່າງຈາກຄົນເພີຣິຊີດໃນການແປນັ້ນຄວນໃຊ້ການສະກົດຊື່ແຕກຕ່າງກັນໂດຍທັ້ງສີ່ນເພື່ອໃຫ້ເຫັນຂໍ້ແຕກຕ່າງທີ່ຊັດເຈນ

## ຄົນເຢບຸດ

### ຂໍ້ເທັດຈິງ

ຄົນເຢບຸດເປັນກຸ່ມຄົນທີ່ດຳລົງຊີວິດໃນແຜ່ນດິນການານອານ. ພວກເຂົາສືບເຊື້ອສາຍມາຈາກລູກຊາຍຂອງຮາມຄືການານອານ.

- ຄົນເຢບຸດໄດ້ດຳລົງຊີວິດຢູ່ໃນເມືອງເຢບຸດ,ຊຶ່ງຕໍ່ມາຊື່ນີ້ໄດ້ປ່ຽນມາເປັນເຢຣູຊາເລັມໃນຕອນທີ່ກະສັດດາວິດໄດ້ຊະນະເມືອງນີ້.
- ເມລີເຊເດັກ,ກະສັດຂອງຊາເລັມ,ບາງເທື່ອອາດເປັນຕົ້ນກຳເນີດຂອງຄົນເຢບຸດ.

## ຄົນໂງ່, ໂງ່, ຄວາມໂງ່

### ນິຍາມ

ຄຳວ່າ "ຄົນໂງ່" ກ່າວເຖິງຄົນທີ່ມັກເລືອກສິ່ງທີ່ຜິດໆ, ໂດຍສະເພາະຢ່າງຍິ່ງ ການເລືອກທີ່ບໍ່ເຊື່ອຟັງ ຄຳວ່າ "ໂງ່"
ບັນລະຍາຍວ່າຄົນຫຼືພຶດຕິກຳທີ່ບໍ່ສະຫຼາດ.

- ໃນພຣະຄຳພີຄຳວ່າ "ຄົນໂງ່" ມັກຈະອ້າງເຖິງຄົນທີ່ບໍ່ສັດທາຫຼືບໍ່ເຊື່ອຟັງພຣະເຈົ້າ. ຄຳນີ້ຈະແຕກຕ່າງກັບຄົນສະຫຼາດ,
  ຜູ້ທີ່ວາງໃຈໃນພຣະເຈົ້າແລະເຊື່ອຟັງພຣະອົງ.
- ໃນເພງສັນລະເສີນ, ດາວິດບັນລະຍາຍວ່າຄົນໂງ່ນັ້ນຄືຄົນທີ່ບໍ່ສັດທາໃນພຣະເຈົ້າ,ຜູ້ທີ່ເພີກເສີຍຕໍ່ຫຼັກຖານການຊົງສ້າງຂອງພຣະອົງ.
- ໃນພັນທະສັນຍາເດີມໃນພຣະທັມສຸພາສິດໃຫ້ຄຳອະທິບາຍຫຼາຍຢ່າງກ່ຽວກັບຄົນໂງ່,ຫຼືບຸກຄົນທີ່ໂງ່ຈ້ານັ້ນເປັນຢ່າງໃດ.
- ຄຳວ່າ "ຄວາມໂງ່" ອ້າງເຖິງການກະທຳທີ່ບໍ່ສະຫຼາດເພາະວ່າສິ່ງນັ້ນຕໍ່ຕ້ານນ້ຳພຣະທັຍພຣະເຈົ້າ ຫຼາຍໆຄັ້ງຄຳວ່າ "ຄວາມໂງ່"
  ຍັງລວມເຖິງຄວາມໝາຍຂອງບາງສິ່ງທີ່ໜ້າຢາກຫົວຫຼືອັນຕະລາຍດ້ວຍ.


generated on Thu Jul 10 08:45:04 2025

### ຄຳແນະນຳການແປ

- ຄຳວ່າ "ຄົນໂງ່" ສາມາດແປໄດ້ອີກວ່າ "ຄົນຈ້ຳ" ຫຼື "ຄົນທີ່ບໍ່ສະຫຼາດ " ຫຼື "ຄົນທີ່ໄຮ້ສາລະ" ຫຼື "ຄົນອະທັມ"
- ແນວທາງການແປຄຳວ່າ "ໂງ່" ສາມາດລວມທັ້ງ "ຂາດຄວາມເຂົ້າໃຈ " ຫຼື "ບໍ່ສະຫຼາດ " ຫຼື "ໄຮ້ສາລະ".

## ຄົນໝ້ຳຊື່ໃຈຄົດ, ການໝ້ຳຊື່ໃຈຄົດ

### ນິຍາມ

ຄຳວ່າ "ຄົນໝ້ຳຊື່ໃຈຄົດ" ອ້າງເຖິງຄົນທີ່ເຮັດສິ່ງທີ່ເບິ່ງເໝືອນຊອບທຳ, ແຕ່ແອບປະພຶດໃນສິ່ງທີ່ຊົ່ວຮ້າຍ. ຄຳວ່າ "ການໝ້ຳຊື່ໃຈຄົດ" ອ້າງເຖິງພຶດຕິກຳທີ່ຫລອກລວງຜູ້ຄົນໃຫ້ຄິດວ່າຄົນນັ້ນເປັນຄົນຊອບທຳ.

- ຄົນໝ້ຳຊື່ໃຈຄົດຕ້ອງການໃຫ້ຄົນອື່ນເຫັນວ່າຕົນເອງເຮັດສິ່ງທີ່ດີເພື່ອທີ່ວ່າຄົນອື່ນຈະຄິດວ່າພວກເຂົາເປັນຄົນດີ.
- ຄົນໝ້ຳຊື່ໃຈຄົດມັກຈະວິພາກວິຈານຄົນອື່ນວ່າເຮັດສິ່ງທີ່ເປັນຄວາມບາບຊຶ່ງພວກເຂົາເອງກໍລັກເຮັດ.
- ພຣະເຢຊູຊົງເອີ້ນພວກຟາຣີຊາຍວ່າຄົນໝ້ຳຊື່ໃຈຄົດເພາະພວກເຂົາເຮັດແລະປະພຶດຕາມຫລັກສາດສະໜາເຊັ່ນ ໃສ່ເສື້ອຜ້າບາງຢ່າງແລະຮັບປະທານອາຫານບາງຢ່າງ, ແຕ່ພວກເຂົາບໍ່ໄດ້ເມດຕາຫລືຍຸຕິທຳຕໍ່ຄົນອື່ນ.
- ຄົນໝ້ຳຊື່ໃຈຄົດຊີ້ຄວາມຜິດໃນຕົວຄົນອື່ນໄດ້, ແຕ່ບ່ຍອມຮັບຄວາມຜິດຂອງຕົນເອງ.

.

### ຄຳແນະນຳໃນການແປ

- ບາງພາສາມີຄຳກ່າວເຊັ່ນ "ສອງໜ້າ" ທີ່ອ້າງເຖິງຄົນໝ້ຳຊື່ໃຈຄົດຫຼືການປະພຶດຂອງຄົນໝ້ຳຊື່ໃຈຄົດ.
- ວິທີອື່ນທີ່ຈະແປ "ຄົນໝ້ຳຊື່ໃຈຄົດ" ສາມາດລວມເຖິງ, "ຄົນຫລອກລວງ" ຫຼື"ຄົນທຳທ່າ" ຫຼື "ຄົນຈອງຫອງຫລອກລວງ."
- ຄຳວ່າ "ການໝ້ຳຊື່ໃຈຄົດ" ສາມາດແປໄດ້ວ່າ, "ການຫລອກລວງ" ຫລື "ການກະທຳທີ່ຈອມປອມ" ຫລື "ການທຳທ່າ."

## ຄ່າໄຖ່

### ນິຍາມ

ຄຳວ່າ "ຄ່າໄຖ່" ໝາຍເຖິງຈຳນວນເງິນຫຼືການຈ່າຍໂດຍການຖືກບັງຄັບຫຼືຈ່າຍເພື່ອໄຖ່ໃຜຜູ້ນຶ່ງທີ່ຖືກຈັບກຸມ.

- ຄຳວ່າ "ໄຖ່" ເປັນຄຳກິຣິຍາ ໝາຍເຖິງຈ່າຍເງິນ ຫຼືເຮັດບາງຢ່າງທີ່ເປັນການເສຍສະຫຼະຕົນເອງເພື່ອໄຖ່ໃຜຜູ້ນຶ່ງທີ່ຖືກຈັບກຸມ, ເປັນທາດຫຼືຕິດຄຸກ. ຄວາມໝາຍຂອງຄຳວ່າ "ຊື້ຄືນ"ມີຄວາມໝາຍຄືກັນກັບ "ໄຖ່ຄືນ."
- ພຣະເຢຊູ ອະນຸຍາດຕົວເອງໃຫ້ຖືກຂ້າເພື່ອເປັນຄ່າໄຖ່ມະນຸດໃຫ້ຫຼຸດພົ້ນຂອງການເປັນທາດຄວາມບາບຂອງພວກເຂົາ. ການເຮັດແບບນີ້ຂອງພຣະເຈົ້າເພື່ອຊື້ຄືນຄົນຂອງພຣະອົງຜ່ານການຈ່າຍແທນຄວາມຜິດບາບຂອງພວກເຂົາ ທີ່ເອີ້ນອີກຢ່າງນຶ່ງວ່າ "ການໄຖ່ບາບ" ຢູ່ໃນພຣະຄັມພີ.

### ຄຳແນະນຳໃນການແປ

- ຄຳວ່າ "ການໄຖ່" ສາມາດແປໄດ້ອີກຢ່າງເຊັ່ນ "ການຈ່າຍເພື່ອປົດປ່ອຍ" ຫຼື "ຈ່າຍຄ່າເພື່ອເປັນອິດສະຫຼະ ຫຼື "ຊື້ຄືນ"ບາງຄົນ.
- ຄຳວ່າ "ຈ່າຍຄ່າໄຖ່" ສາມາດແປໄດ້ອີກຢ່າງເຊັ່ນ "ຈ່າຍຄ່າລາຄາ"

## ຄ້ຳຄວນ

### ນິຍາມ

ຄຳວ່າ "ຄ້ຳຄວນ" ອ້າງເຖິງການເປ່ັງສຽງສູງສຽງຕ່ຳ,ຊຶ່ງເກີດຈາກຄວາມທຸກທາງຮ່າງກາຍຫລືຈິດໃຈ.
ໂດຍປົກກະຕິມັກຈະຄ້ຳຄວນໂດຍບໍ່ມີຄຳໃດໆ.

- ບຸກຄົນສາມາດຄ້ຳຄວນເພາະຮູ້ສຶກເສົ້າໂສກເສຍໃຈ.
- ການຄຳຄວນສາມາດເກີດຈາກສາເຫດຂອງຄວາມຮູ້ສຶກບໍ່ດີ,

ຫລືພາລະທີ່ກົດດັນ.

- ວິທີອື່ນໃນການແປຄຳວ່າ "ຄ້ຳຄວນ,"ນີ້ສາມາດລວມເຖິງ "ຮ້ອງໃຫ້ດ້ວຍສຽງຕ່ຳ" ຫລື "ເສຍໃຈຢ່າງສຸດຊຶ້ງ".


generated on Thu Jul 10 08:45:04 2025

- ຖ້າເປັນຄຳນາມແປວ່າ "ສຽງຮ້ອງໃຫ້ເປັນທຸກຕ່າງໆ," ຫລື "ສຽງພຶມພຳຂອງຄວາມເຈັບປວດ".

## ຄຳສັ່ງ, ກົດ, ພຣະຣາຊະດີກາ

### ນິຍາມ

ຄຳວ່າ "ຄຳສັ່ງ, ກົດ, ພຣະຣາຊະດີກາ" ຊຶ່ງເປັນຕົວກຳນົດກົດລະບຽບ ຫລື ຄຳສັ່ງ ເພື່ອໃຫ້ປະຊາຊົນກະທຳຕາມ.
ຄຳນີ້ມີຄວາມກ່ຽວຂ້ອງກັບຄຳວ່າ "ແຕ່ງຕັ້ງ."

- ບາງເທື່ອຄຳສັ່ງ ເປັນປະເພນີ ທີ່ໄດ້ກະທຳສືບທອດກັນຕໍ່ມາຢ່າງຍາວນານ.
- ໃນພຣະຄຳພີ, ຄຳວ່າ "ຄຳສັ່ງ" ຄືບາງສິ່ງທີ່ພຣະເຈົ້າ ໄດ້ບັນຊາຊາວອິສະຣາເອນ ໃຫ້ກະທຳຕາມ.
  ໃນບາງເທື່ອພຣະອົງໄດ້ຊົງສັ່ງໃຫ້ພວກເຂົາ ປະຕິບັດຕາມຕະຫລອດໄປ.
- ຄຳວ່າ "ຄຳສັ່ງ" ສາມາດແປວ່າ "ກົດສາທາຣະນະ" ຫລື "ກົດລະບຽບ" ຫລື "ກົດຫມາຍ" ຂຶ້ນຢູ່ກັບບໍຣິບົດທີ່ນຳໃຊ້.

## ຄຳສາບານ, ສາບົດ, ສາບານໂດຍ...

### ນິຍາມ

ໃນພຣະຄັມພີ, ການສາບານ ຄືການເຮັດສັນຍາ ເປັນທາງການວ່າຈະເຮັດສິ່ງໃດສິ່ງໜຶ່ງ. ບຸກຄົນທີ່ສາບານນັ້ນ ຈະຕ້ອງທຳຕາມທີ່ສັນຍາໄວ້
ການສາບານກ່ຽວຂ້ອງ ກັບຄວາມມຸ່ງຫມັ້ນທີ່ຈະສັດຊື ແລະຈິງໃຈ.

- ຫລາຍເທື່ອຢູ່ໃນສານ, ພະຍານໃຫ້ຄຳສາບານ ເພື່ອສັນຍາວ່າສິ່ງທີ່ເຂົາຈະເວົ້ານັ້ນເປັນຄວາມຈິງ ແລະຕົງຕາມຂໍ້ແທ້ຈິງ.
- ໃນພຣະຄັມພີນັ້ນ ຄຳວ່າ "ສາບານ" ໝາຍເຖິງການກ່າວຄຳສາບານ.
- ຄຳວ່າ "ສາບານໂດຍ" ຫມາຍເຖິງ ການອ້າງເຖິງນາມ ຫລືຊື່ຂອງບາງສິ່ງ ເຊິ່ງເປັນພື້ນຖານ ຫລືມີພະລັງຕໍ່ຄຳສາບານນັ້ນ.
- ບາງຄັ້ງ ຄຳເຫລົ່ານີ ຈະໃຊ້ນຳກັນ 'ສາບົດສາບານ.'
- ອັບຣາຮາມ ແລະອາບີເມເຫລັກ ໄດ້ກ່າວຄຳສາບານເມື່ອພວກເຂົາ ໄດ້ເຮັດພັນທະສັນຍາຮ່ວມກັນ ກ່ຽວກັບການໃຊ້ ບໍ່ນ້ຳ.
- ອັບຣາຮາມ ໃຫ້ຄົນໃຊ້ສາບານ (ຫລືສັນຍາຢ່າງເປັນທາງການ) ວ່າເຂົາຈະຫາເມຍ ໃຫ້ອີຊາກຈາກບ້ານດາຕະກູນ ຂອງອັບຣາຮາມ.
- ພຣະເຈົ້າກໍ່ກ່າວ ຄຳສາບານເຊັ່ນດຽວກັນ ເຊິ່ງພຣະອົງສັນຍາກັບປະຊາຊາອນຂອງພຣະອົງ.
- ຄວາມໝາຍຂອງຄຳວ່າ "ສາບົດ" ໃນສະໄຫມໃຫມ່ ນັ້ນໝາຍເຖິງການໃຊ້ຄຳເວົ້າທີ່ບໍ່ສຸພາບ ເຊິ່ງບໍ່ແມ່ນຄວາມໝາຍ
  ດຽວກັນທີ່ໃຊ້ໃນພຣະຄັມພີ.

### ຄຳແນະນຳໃນການແປ

- ຂຶ້ນຢູ່ກັບບໍຣິບົດ ຄຳວ່າ "ຄຳສາບານ" ນັ້ນສາມາດແປໄດ້ວ່າ "ຄຳປະຕິຍານ" ຫລື "ການສັນຍາ ຢ່າງເປັນພິທີການ."
- ຄຳວ່າ "ສາບົດ" ສາມາດແປໄດ້ວ່າ "ສັນຍາຢ່າງເປັນທາງການ" ຫລື "ປະຕິຍານວ່າ" ຫລື "ໃຫ້ຄຳໝັ້ນວ່າ ຈະທຳບາງສິ່ງບາງຢ່າງ"
- ວິທີອື່ນໃນການແປ "ປະຕິຍານໃນນາມຂອງເຮົາ" ສາມາດລວມ "ເຮັດສັນຍາ ໂດຍໃຊ້ນາມຂອງເຮົາ ເພື່ອຢືນຢັນ."
- "ການສັນຍາ ໂດຍຟ້າສະຫວັນ ແລະແຜ່ນດິນໂລກ" ນັ້ນສາມາດແປໄດ້ວ່າ, "ສັນຍາທີ່ຈະເຮັດ ບາງສິ່ງບາງຢ່າງໂດຍເອົາສະຫວັນ
  ແລະແຜ່ນດິນໂລກ ມາຢືນຢັນ."
- ໃຫ້ໝັ້ນໃຈວ່າ ການແປຄຳວ່າ "ສາບົດ" ຫລື "ສາບານ" ນັ້ນບໍ່ໄດ້ອ້າງເຖິງ ການສາບແຊ່ງ. ໃນພຣະຄັມພີ
  ແມ່ນບໍ່ມີຄວາມຫມາຍແບບນັ້ນ.

## ຄໍແຂງ,ດື້ດ້ານ

### ນິຍາມ

ຄຳວ່າ "ຄໍແຂງ" ເປັນຄຳເວົ້າທີ່ໃຊ້ໃນພຣະຄຳພີ ເພື່ອອະທິບາຍເຖິງຜູ້ທີ່ບໍ່ເຊື່ອຟັງພຣະເຈົ້າ ແລະບໍ່ຍອມກັບໃຈ
ພວກເຂົາພູມໃຈຫລາຍແລະບໍ່ຍອມຢູ່ໃຕ້ອຳນາດຂອງພຣະເຈົ້າ.

- ໃນທຳນອງດຽວກັນຄຳວ່າ "ດື້ດ້ານ"
  ໝາຍເຖິງການປະຕິເສດການປ່ຽນແປງຈິດໃຈຫລືການກະທຳຂອງຄົນເຮົາ,ເຖິງແມ່ນວ່າຈະຖືກຂໍໃຫ້ເຮັດກໍ່ຕາມ,
  ຄົນທີ່ແຂງກະດ້າງຈະບໍ່ເຊື່ອຟັງຄຳແນະນຳ ຫລື ຄຳເຕືອນທີ່ດີທີ່ຄົນອື່ນແນະນຳໃຫ້ພວກເຂົາ.
- ໃນພຣະຄຳພີເດີມໄດ້ອະທິບາຍເຖິງຊາວອິດສະຣາເອນທີ່ "ຄໍແຂງ"
  ເພາະວ່າພວກເຂົາບໍ່ຟັງຄຳສອນຫລາຍຢ່າງຈາກຜູ້ປະກາດພຣະທຳຂອງພຣະເຈົ້າ
  ຜູ້ທີ່ເຮັດໃຫ້ພວກເຂົາກັບໃຈແລະຫັນກັບມາຫາພຣະເຈົ້າຢາເວ.


generated on Thu Jul 10 08:45:04 2025

- ຖ້າຄໍ "ແຂງ" ໝາຍຄວາມວ່າມັນບໍ່ງໍໄດ້ງ່າຍ ພາສາໃນການແປອາດມີຄໍາເວົ້າທີ່ແຕກຕ່າງໄປທີ່ສື່ຄວາມໝາຍວ່າບຸກຄົນໃດໜຶ່ງ "ບໍ່ກົ້ມລົງ" ນັ້ນຄື ປະຕິເສດການປ່ຽນແປງການດໍາເນີນຊີວິດຂອງລາວ.
- ວິທີການອື່ນໃນການແປຄໍາສັບນີ້ອາດປະກອບມີ "ອວດອົ່ງທະນົງຕົວ" ຫລື "ອວດອົ່ງແລະບໍ່ຍອມຈໍານົນ" ຫລື "ປະຕິເສດທີ່ຈະປ່ຽນແປງ".

## ງານລ້ຽງ

### ນິຍາມ

ການຈັດງານລ້ຽງແມ່ນມີຂະໜາດໃຫຍ່, ເປັນອາຫານທາງການເຊິ່ງປົກກະຕິແລ້ວປະກອບມີຫລາຍອາຫານ.

- ໃນສະ ໄໝກ່ອນ,ກະສັດມັກຈະຈັດງານລ້ຽງອາຫານເພື່ອຕ້ອນຮັບບັນດາຜູ້ນໍາການເມືອງແລະແຂກທີ່ສໍາຄັນອື່ນໆ.
- ນີ້ຍັງສາມາດຖືກແປເປັນ "ຄາບອາຫານທີ່ລະອຽດ" ຫລື "ງານລ້ຽງທີ່ ສໍາ ຄັນ" ຫລື "ອາຫານທີ່ມີຫລາຍຫລັກສູດ."

## ງໃຫ່ຍ, ງ ,ງມີພິດ

### ນິຍາມ

ຂໍ້ຄວາມເຫຼົ່ານີ້ທັງໝົດ ໝາຍເຖິງສັດເລືອຄານທີ່ມີຮ່າງກາຍທີ່ຍາວ, ບາງແລະມີຂະໜາດໃຫຍ່, ແຂ້ວໃຫ່ຍ, ແລະເຄື່ອນທີ່ໂດຍການລ້ຽວໄປມາແລະໄປທົ່ວພື້ນດິນ. ຄໍາວ່າ“ ງ” ໂດຍປົກກະຕິ ໝາຍເຖິງງູໃຫຍ່ແລະ“ ງູພິດ” ໝາຍເຖິງງູປະເພດໜຶ່ງທີ່ມີພິດເຊິ່ງມັນໃຊ້ປ້ອງກັນຕົວເອງເພື່ອໃຫ້ພິດຂອງມັນຫໍາລາຍສິ່ງທີ່ຢູ່ອ້ອມຮ້ອມຕົວຂອງມັນ.

- ສັດຊະນິດນີ້ຍັງຖືກນໍາໃຊ້ກັບຄົນເພື່ອ ໝາຍເຖິງຄົນຊົ່ວ, ໂດຍສະເພາະແມ່ນການຫຼອກລວງ.
- ພຣະເຢຊູເອີ້ນພວກຫົວໜ້າ ສາສະໜາວ່າ“ ເຊື້ອສາຍຂອງງູ” ເພາະວ່າພວກເຂົາທໍາທ່າວ່າເປັນຄົນຊອບທໍາ, ແຕ່ພວກເຂົາຫຼອກລວງຜູ້ຄົນແລະປະຕິບັດຕໍ່ພວກເຂົາຢ່າງບໍ່ຍຸດຕິທໍາ.
- ໃນສວນເອເດນ ຊາຕານໄດ້ເອົາຮູບແບບຂອງງູໃນເວລາທີ່ລາວເວົ້າກັບເອວາແລະລໍ້ລວງນາງບໍ່ໃຫ້ເຊື່ອຟັງພຣະເຈົ້າ.
- ຫລັງຈາກງູໄດ້ລໍ້ລວງເອວາໃຫ້ເຮັດບາບ, ພຣະເຈົ້າໄດ້ສາບແຊ່ງງູ, ໂດຍກ່າວວ່ານັບແຕ່ນັ້ນເປັນຕົ້ນມາ, ງູທັ້ງໝົດຈະລ່ອງໄປຕາມພື້ນດິນ, ໝາຍຄວາມວ່າກ່ອນນັ້ນມັນຈະມີຂາ.

## ງົວ, ງົວຫລາຍຕົວ

### ນິຍາມ

ຄໍາວ່າ "ງົວ" ເວົ້າເຖິງສັດລ້ຽງປະເພດໜຶ່ງເຊິ່ງໄດ້ຮັບການຝຶກເປັນພິເສດໃຫ້ເຮັດວຽກກະສິກໍາ. ໃນພາສາອັງກິດນັ້ນຮູບພະຫູພິດແມ່ນ "ງົວຫລາຍຕົວ" ຕາມປົກກະຕິແລ້ວງົວຈະໝາຍເຖິງງົວຕົວຜູ້ເຊິ່ງຖືກເຮັດໝັນແລ້ວ.

- ຕະຫລອດພຣະຄໍາພີ, ງົວໄດ້ຮັບການກ່າວເຖິງວ່າເປັນສັດທີ່ຕ້ອງແບກແອກເພື່ອລາກກວ່ນຫລືໄຖນາ.
- ງົວຫລາຍຕົວທີ່ເຮັດວຽກນໍາກັນພາຍໃຕ້ແອກເປັນເຫດການທີ່ສາມາດພົບໄດ້ທົ່ວໄປໃນສະໄໝຂອງພຣະຄໍາພີ ປະໂຫຍກ "ຢູ່ພາຍໃຕ້ແອກ" ກາຍເປັນຄໍາອຸບປະມາຂອງງານໝັກດ້ວຍການໃຊ້ແຮງງານ.
- ງົວຕົວຜູ້ເປັນສັດລ້ຽງຕົວຜູ້ ແຕ່ເປັນງົວຕົວຜູ້ທີ່ຍັງບໍ່ໄດ້ເຮັດໝັນແລະບໍ່ໄດ້ຖືກຝຶກໃຫ້ເປັນສັດເຮັດວຽກ.

## ງົວຕົວເມຍ, ລູກງົວ, ງົວຕົວຜູ້ ,ປະສຸສັດ

### ນິຍາມ

ຄໍາວ່າ, "ປະສຸສັດ" ກ່າວເຖິງຝາມລ້ຽງສັດຂະໜາດໃຫຍ່, ສັດສີ່ຂາທີ່ກິນຫຍ້າ ແລະລ້ຽງເພື່ອເອົາເນື້ອແລະນົມເປັນຫຼັກ.

- ເພດເມຍຂອງສັດຊະນິດນີ້ເອີ້ນວ່າ "ງົວຕົວເມຍ," ເພດຜູ້ເອີ້ນວ່າເປັນ "ງົວຕົວຜູ້," ແລະລູກຫຼານຂອງພວກມັນຄື "ລູກງົວ."
- ໃນບາງຄັ້ງຄໍາວ່າ "ງົວຕົວເມຍ"ຖືກໃຊ້ທົ່ວໄປເພື່ອໝາຍເຖິງ

ປະສຸສັດທັງໝົດ.

- ໃນບາງວັດທະນະທໍາ, ປະສຸສັດ ໃຊ້ຊື້ຂາຍເພື່ອແລກກັບສິນຄ້າ.


generated on Thu Jul 10 08:45:04 2025

ບາງຄັ້ງພວກມັນຈະໃຊ້ເປັນຂອງຂັວນໃຫ້ກັບພໍ່ ແມ່ ຂອງຍິງສາວທີ່ຜູ້ຊາຍປາຖະໜາຈະແຕ່ງງານດ້ວຍ.

- ໃນພຣະຄໍາພີ, ຊາວຢິວ ໃຊ້ປະສຸສັດສໍາລັບເປັນສັດບູຊາ,

ໂດຍສະເພາະຊະນິດໜຶ່ງທີ່ເອີ້ນວ່ານົກເຕົ້ອເມຍແດງ.

- "ນົກສາວ" ເປັນນົກເຕົ້ອເມຍທີ່ຍັງບໍ່ມີລູກ.
- "ນົກເຕົ້ອຜູ້" ເປັນນົກຊະນິດພິເສດທີ່ໃຊ້ສໍາລັບງານກະເສດຕະກໍາ, ເຊັ່ນການໄຖນາ.

## ງົວທະເລ

### ນິຍາມ

ຄໍາ ວ່າ“ ງົວທະເລ” ໝາຍ ເຖິງສັດທະເລໃຫຍ່ທີ່ກິນຫຍ້າທະເລແລະພືດຜັກອື່ນໆຢູ່ພື້ນມະຫາສະໝຸດ.

- ງົວທະເລແມ່ນສີຂີ້ເຖົ່າທີ່ມີຜິວໜາ. ມັນເຄື່ອນທີ່ຢູ່ໃນນ້ ຳໂດຍໃຊ້ປຸ່ຍຂອງມັນ.
- ຄົນໃນຍຸກສະ ໄໝ ພຣະຄໍາພີ ໃຊ້ໜັງ ຫລື ໜັງງົວ. ແຜ່ນສັດເຫຼົ່ານີ້ຖືກໃຊ້ໃນການປົກຫຸ້ມຂອງຫໍເຕັ້ນ.
- ມັນຖືກຕັ້ງຊື່ວ່າ "ງົວທະເລ" ເພາະມັນກິນຫຍ້າຄືກັບງົວ, ແຕ່ມັນບໍ່ຄ້າຍຄືກັນໃນທາງອື່ນ.
- ສັດທີ່ກ່ຽວຂ້ອງແມ່ນສັດ "ດູກອງ" ແລະ "ມານາທີ."

## ງົວແມ່ສາວ

### ນິຍາມ

ງົວແມ່ສາວຄືງົວໂຕແມ່ ທີ່ໃຫຍ່ແລ້ວແຕ່ຍັງບໍ່ໄດ້ໃຫ້ກໍາເນີດເກີດລູກງົວເທື່ອ.

## ຈະເລີນກ້າວໜ້າ, ຈະເລີນຮຸ່ງເຮືອງ, ຄວາມຮຸ່ງເຮືອງ

### ນິຍາມ

ຄໍາວ່າ"ຈະເລີນກ້າວໜ້າ" ໂດຍທົ່ວໄປອ້າງເຖິງການມີຊີວິດທີ່ດີແລະສາມາດອ້າງເຖິງການຈະເລີນຮຸ່ງເຮືອງທາງຮ່າງກາຍແລະຈິດວິນຍານ
ເມື່ອຄົນຫລືປະເທດ " ຈະເລີນຮຸ່ງເຮືອງ" ໝາຍເຖິງພວກເຂົາມີຖານະລ້ໍາລວຍແລະມີທຸກຢ່າງທີ່ພວກເຂົາຕ້ອງການໃຫ້ປະສົບຄວາມສໍາເຣັດ
ພວກເຂົາກໍາລັງພົບກັບ "ຄວາມຮຸ່ງເຮືອງ"

- ຄໍາວ່າ"ຮຸ່ງເຮືອງ"
  ມັກອ້າງເຖິງການປະສົບຄວາມສໍາເຣັດໃນການເປັນເຈົ້າຂອງເງິນແລະຊັບສິນຫລືໃນການຜະລິດທຸກຢ່າງທີ່ຈໍາເປັນສໍາລັບຄົນເພື່ອໃຫ້ມີຊີວິດທີ່ດີ
- ໃນພະຄັມພີຄໍາວ່າ"ຮຸ່ງເຮືອງ" ຍັງຫມາຍເຖິງສຸກຂະພາບທີ່ດີແລະການໄດ້ຮັບພະພອນກັບລູກຫຼານດ້ວຍ
- ເມືອງຫລືປະເທດ" ທີ່ຮຸ່ງເຮືອງ" ເປັນເມືອງຫລືປະເທດທີ່ຄົນທັ້ງ ຫລາຍ ມີຜະລິດຕະຜົນທີ່ດີ
  ແລະທຸລະກິດທີ່ນໍາເງິນຫລວງຫລາຍມາໃຫ້
- ພະຄັມພີສອນວ່າບຸກຄົນທີ່ຈະ ຈະເລີນຮຸ່ງເຮືອງຝ່າຍວິນຍານໄດ້ເມື່ອທ່ານເຊື່ອຟັງຄໍາສອນຂອງພະເຈົ້າ
  ທ່ານເອງຈະໄດ້ພົບກັບພະພອນແຫ່ງຄວາມຊື່ນຊົມຍິນດີແລະສັນຕິສຸກດ້ວຍ
  ພະເຈົ້າບໍ່ໃຫ້ຄວາມມັ່ງຄັ່ງທາງວັດຖຸຢ່າງຫລວງຫລາຍແກ່ຜູ້ຄົນ
  ແຕ່ພະອົງຈະໃຫ້ພວກທ່ານຈະເລີນຮຸ່ງເຮືອງຝ່າຍວິນຍານເມື່ອພວກທ່ານຍ່າງຕາມຫົນທາງຂອງພະອົງ
- ຂຶ້ນຢູ່ກັບສະພາບການ ຄໍາວ່າ"ຮຸ່ງເຮືອງ" ສາມາດແປໄດ້ວ່າ "ປະສົບຄວາມສໍາເຣັດຝ່າຍວິນຍານ" ຫລື "ໄດ້ຮັບພະພອນຈາກພະເຈົ້າ"
  ຫລື "ມີປະສົບການກັບສິ່ງທີ່ດີ" ຫລື "ມີຊີວິດທີ່ດີ"
- ຄໍາວ່າ" ຮຸ່ງເຮືອງ" ສາມາດແປໄດ້ວ່າ "ປະສົບຄວາມສໍາເຣັດ" ຫລື "ມັ່ງຄັ່ງ" ຫລື"ເກີດຜົນຝ່າຍວິນຍານ"
- "ຮຸ່ງເຮືອງ" ສາມາດແປໄດ້ວ່າ "ມີຊີວິດທີ່ດີ" ຫລື "ລ້ໍາລວຍ" ຫລື "ປະສົບຄວາມສໍາເຣັດ" ຫລື "ພະພອນອັນເຫຼືອລົ້ນ"

## ຈິງ,ຄວາມຈິງ,ກາຍເປັນຈິງ

### ນິຍາມ

ຄໍາວ່າ "ຈິງ" ແລະ "ຄວາມຈິງ" ອ້າງເຖິງແນວຄິດທີ່ເປັນຂໍ້ເທັດຈິງ,ເຫດການທີ່ເກີດຂຶ້ນຈິງ,ແລະຂໍ້ຄວາມທີ່ໄດ້ເວົ້າຈິງ.

- ສິ່ງທີ່ຈິງ, ເປັນຈິງ, ແທ້ຈິງ, ຖືກຕ້ອງ, ຖືກກົດຫມາຍ, ຕາມຂໍ້ເທັດຈິງ.

- ຄວາມຈິງຄືຄວາມເຂົ້າໃຈ, ຄວາມເຊື່ອ, ຄວາມຈິງ,ຫລືຂ້ຄວາມທີ່ເປັນຄວາມຈິງ.
- ຂ້ຄວາມວ່າ "ເປັນຈິງ" ຫລື "ໄດ້ເປັນຈິງ" ເປັນສ່ານວນເຊິ່ງໝາຍຄວາມວ່າຄຳຫ່ານວາຍເກີດຂຶ້ນຈິງຕາມທີ່ຄາດການໄວ້.
- ຄວາມຈິງທັ້ງໝົດເຖິງແນວຄິດການສະແດງໃນແບບທີ່ເຊື່ອຖືໄດ້ແລະຊື່ສັດ.
- ພຣະເຢຊູຄຣິດໄດ້ຊົງສະແດງຄວາມຈິງຂອງພຣະເຈົ້າໃນຄຳເວົ້າທີ່ພຣະອົງໄດ້ກ່າວແລ້ວ.
- ພຣະຄຳຂອງພຣະເຈົ້າຄືຄວາມຈິງ.
  ມັນບອກກ່ຽວກັບສິ່ງທີ່ເກີດຂຶ້ນຈິງແລະສອນສິ່ງທີ່ເປັນຈິງກ່ຽວກັບພຣະເຈົ້າແລະກ່ຽວກັບທຸກສິ່ງທີ່ພຣະອົງໄດ້ຊົງກະທຳ.

### ຄຳແນະນຳໃນການແປ

- ຂຶ້ນຢູ່ກັບບໍລິບົດແລະສິ່ງທີ່ໄດ້ຮັບກ່າວເຖິງ, ຄຳວ່າ "ຈິງ" ອາດແປໂດຍ "ຈິງ" ຫລື "ຄວາມເປັ້ນຈິງ" ຫລື "ຖືກຕ້ອງ" ຫລື "ຖືກຕ້ອງ" ຫລື "ແນ່ນອນ" ຫລື "ຂອງແທ້."
- ວິທີເພື່ອແປຄຳວ່າ "ຄວາມຈິງ" ສາມາດລວມເຖິງ, "ສິ່ງທີ່ເປັນຄວາມຈິງ" ຫລື "ຄວາມເປັ້ນຈິງ" ຫລື "ຄວາມແນ່ນອນ" ຫລື "ຫລັກການ."
- ຄຳກ່າວວ່າ "ເປັ້ນຈິງ" ສາມາດແປວ່າ "ເກີດຂຶ້ນຈິງ" ຫລື "ສຳເລັດ" ຫລື "ເກີດຂຶ້ນຕາມທີ່ຄາດການໄວ້."
- ຄຳກ່າວທີ່ວ່າ "ບອກຄວາມຈິງ" ຫລື "ເວົ້າຄວາມຈິງ" ສາມາດແປວ່າ, "ເວົ້າໃນສິ່ງທີ່ເປັນຄວາມຈິງ" ຫລື "ບອກສິ່ງທີ່ເກີດຂຶ້ນຈິງ" ຫລື "ເວົ້າໃນສິ່ງທີ່ເຊື່ອຖືໄດ້."
- "ຍອມຮັບຄວາມຈິງ" ສາມາດແປວ່າ "ເຊື່ອໃນສິ່ງທີ່ເປັນຄວາມຈິງກ່ຽວກັບພຣະເຈົ້າ."
- ໃນຄຳກ່າວເຊ້ັນ "ນະມັດສະການພຣະເຈົ້າດ້ວຍຈິດວິນຍານແລະຄວາມຈິງ" ຄຳກ່າວ "ໃນຄວາມຈິງ" ສາມາດແປໂດຍ "ເຊື່ອຟັ່ງຢ່າງຊື່ສັດໃນສິ່ງທີ່ພຣະເຈົ້າໄດ້ຊົງສອນເຮົາແລ້ວ."

## ຈິດໃຈ

### ນິຍາມ

ຈິດໃຈເປັ້ນສິ່ງພາຍໃນ, ເບິ່ງບໍ່ເຫັ້ນ, ເປັ້ນສ່ວນນິລັນດອນຂອງບຸກຄົນ. ມັນອ້າງເຖິງສ່ວນທີ່ບໍ່ເປັ້ນຮ່າງກາຍຂອງບຸກຄົນ.

- ຄຳວ່າ "ຈິດໃຈ" ແລະ"ວິນຍານ" ອາດມີແນວຄິດສອງແບບ, ຫລືອາດເປັ້ນຄຳສອງຄຳທີ່ມີຄວາມໝາຍເຖິງຄວາມຄິດດຽວກັ້ນ.
- ເມື່ອບຸກຄົນຕາຍ ຈິດວິນຍານຂອງເຂົາກໍ່ໄດ້ອອກຈາກຮ່າງກາຍໄປ.
- ຄຳວ່າ "ວິນຍານ" ບາງເທື່ອຈະໃຊ້ເປັ້ນຄຳປຽບທຽບທີ່ອ້າງເຖິງບຸກຄົນທັ້ງຕົວ. ຕົວຢ່າງເຊ້ັນ "ຈິດໃຈທີ່ເຮັດບາບ" ໝາຍເຖິງ, "ບຸກຄົນທີ່ເຮັດບາບ" ແລະ "ຈິດໃຈຂອງຂ້ານພຣະເຈົ້າອິດເມື່ອຍ" ໝາຍເຖິງ "ຂ້ານພຣະເຈົ້າອິດເມື່ອຍ."

### ເບິ່ງເພີ່ມຕື່ມ

- ຄຳວ່າ "ຈິດໃຈ" ສາມາດແປວ່າ "ຮ່າງພາຍໃນ" ຫລື "ພາຍໃນບຸກຄົນ."
- ໃນບາງສະພາບການ "ວິນຍານຂອງຂ້ອຍ" ສາມາດແປວ່າ, "ຂ້ອຍ" ຫລື "ຂ້ອຍ."

"ໂດຍປົກກະຕິ ຄຳວ່າ "ຈິດໃຈ" ສາມາດແປວ່າ "ບຸກຄົນ" ຫລື "ເຂົາ" ຫລື "ທ່ານ," ຂຶ້ນຢູ່ກັບສະພາບການ

- ບາງພາສາອາດມີພຽງຄຳດຽວທີ່ແປວ່າ "ຈິດໃຈ" ແລະ "ວິນຍານ."
- ໃນເຮັບເຣີ 4.12 ໃນຄຳວ່າ "ແບ່ງຈິດໃຈແລະວິນຍານ," ສາມາດໝາຍຄວາມວ່າ, "ຫຍັ້ງຮູ້ຢ່າງເລິກໆ ຫລື ສະແດງອອກສິ່ງພາຍໃນບຸກຄົນ."

## ຈິບຫາຍ

### ນິຍາມ

ຄຳວ່າ "ຈິບຫາຍ" ໝາຍເຖິງຕາຍຫຼືຖືກທຳລາຍເຊິ່ງມັກຈະເປັ້ນຜົນມາຈາກຄວາມຮຸ້ນແຮງຫຼືໄພພິບັດ ໃນພຣະຄຳພີນັ້ນ
ຄຳນີ້ມີຄວາມໝາຍວ່າຖືກລົງໂທດໃນນາລົກຊົ່ວນິລັນດອນ

- ຜູ້ຄົນທີ່ກຳລັ້ງ "ຈິບຫາຍ" ໝາຍເຖິງຜູ້ຄົນເຊິ່ງປາຍທາງຂອງທ່ານນັ້ນຄືນາລົກເພາະພວກທ່ານປະຕິເສດທີ່ຈະເຊື່ອໃນພຣະເຢຊູມາເປັ້ນ ພຣະຊ່ວຍໃຫ້ພົ້ນ
- ໃນໂຢຮັ້ນ 3:16 ໄດ້ສອນເຮົາໃນເລື້ອງຂອງຄວາມ "ຈິບຫາຍ" ວ່າໝາຍເຖິງການບໍ່ໄດ້ຢູ່ໃນສະຫວັ້ນນິລັນດອນ


generated on Thu Jul 10 08:45:04 2025

### ຄຳແນະນຳໃນການແປ

- ຂຶ້ນຢູ່ກັບກໍລະນີ ຂອງເນື້ອຄວາມ ວິທີການແປຄຳນີ້ສາມາດທັ້ງໝົດ "ຕາຍນິລັນດອນ" ຫຼື "ຖືກລົງໂທດໃນນາລົກ" ຫຼື "ຖືກທຳລາຍ"
- ໃຫ້ແນ່ໃຈວ່າເມື່ອແປຄຳວ່າ "ຈິບຫາຍ" ສາມາດມີຄວາມໝາຍວ່າຢູ່ໃນນາລົກຊົ່ວນິລັນດອນ ບໍ່ໄດ້ມີໝາຍຄວາມວ່າ "ຢຸດທີຈະມີຊີວິດຢູ່"

## ຈິດຫມາຍ, ຈິດຫມາຍຝາກ

### ນິຍາມ

ຈິດຫມາຍຄືຂໍ້ຄວາມທີ່ຂຽນສົ່ງເຖິງບຸກຄົນ ຫລືກຸ່ມບຸກຄົນທີ່ມັກຈະຢູ່ຫ່າງໄກຈາກຜູ້ຂຽນ ຈິດໝາຍຝາກຄືຮູບແບບການຂຽນຈິດໝາຍທີ່ພິເສດ ມັກຈະຖືກຂຽນໃນຮູບແບບທາງການຫລາຍກວ່າ ສຳຫລັບຈຸດປະສົງພິເສດ ເຊັ່ນເພື່ອການສອນ

- ໃນສະໄຫມຂອງພັນທະສັນຍາໃຫ່ມ ຈິດໝາຍຝາກ ແລະ ຈິດຫມາຍມນຮູບແບອື່ນໆ ນັ້ນຖືກຂຽນຢູ່ເທິງແຜ່ນຫນັງສັດ ຫຼື ຕົ້ນ ປາປີລັດທີ່ເຮັດມາຈາກເສັ້ນໃຍພືດ.
- ຈິດຫມາຍຝາກໃນພັນທະສັນຍາໃຫ່ມທີ່ຂຽນໂດຍ ໂປໂລ, ໂຢຮັນ, ຢາໂກໂບ, ຢູດາ ແລະ ເປໂຕ ເປັນຈິດໝາຍທີ່ພວກຂົ່ານຂຽນເພື່ອໜູນໃຈເຕືອນສະຕິ ແລະ ສອນຄຣິສຕຽນໃນຍຸກທຳອິດຫຶອາໃສ່ຢູ່ໃນຫລາຍເມືອງຫົວເມືອງມະຫາອານາຈັກໂຣມ.
- ວິທີການແປຄຳນີ້ສາມາດລວບລວມ " ຄຳສອນທີ່ເປັນງານຂຽນ " ຫລື " ຖ້ອຍຄຳທີ່ໄດ້ຂຽນໄວ້ " ຫລື " ການຂຽນ. "

## ຊອກຫາ, ສະແຫວງຫາ

### ນິຍາມ

ຄຳວ່າ "ສະແຫວງຫາ" ໝາຍເຖິງຊອກຫາສິ່ງໃດສິ່ງໜຶ່ງ ຫລືບາງຄົນ.ຖືກ ຄວາມເຄັ່ງຕຶງທີ່ຜ່ານມາແມ່ນ "ສະແຫວງຫາ." ມັນຍັງສາມາດໝາຍຄວາມວ່າ "ພະຍາຍາມຢ່າງຫນັກ" ເພື່ອຊອກຫາບາງສິ່ງບາງຢ່າງ.

- ການ“ ສະແຫວງຫາ” ຫລື“ ຊອກຫາ” ໂອກາດ ໝາຍຄວາມວ່າ“ ພະຍາຍາມຫາເວລາ” ເພື່ອເຮັດສິ່ງໃດໜຶ່ງໂດຍສະເພາະເພື່ອຈະແຈ້ງ.
- ການ“ ສະແຫວງຫາ ພຣະເຈົ້າຢາເວ” ໝາຍຄວາມວ່າ“ ໃຊ້ເວລາແລະ ຊອກຫາພຣະເຈົ້າເຢເວເພື່ອຮູ້ຈັກ ແລະຮຽນຮູ້ທີ່ຈະເຊື່ອຟັງພະອົງ.”
- "ສະແຫວງຫາການປົກປ້ອງ" ໝາຍຄວາມວ່າ "ພະຍາຍາມຊອກຫາບຸກຄົນຫຼືສະຖານທີ່ທີ່ຈະປົກປ້ອງຫ່ານຈາກໄພອັນຕະລາຍ."
- ການ“ ສະແຫວງຫາຄວາມຍຸດຕິທຳ” ໝາຍຄວາມວ່າ“ ພະຍາຍາມທີ່ຈະເຫັ່ນຄົນອື່ນຖືກປະຕິບັດຢ່າງທ່ຽງທຳ ຫຼື ຍຸດຕິທຳ.”
- ການ“ ສະແຫວງຫາຄວາມຈິງ” ໝາຍຄວາມວ່າ“ ພະຍາຍາມຄົ້ນຫາຄວາມຈິງ”.
- ການ“ ສະແຫວງຫາຄວາມເມດຕາຄວາມຊອບທຳ” ໝາຍ ຄວາມວ່າ“ ພະຍາຍາມທີ່ຈະໄດ້ຮັບຄວາມເມດຕາຄວາມຊອບທຳ” ຫລື“ເຮັດສິ່ງຕ່າງໆທີ່ຈະເຮັດໃຫ້ຜູ້ໃດຜູ້ໜຶ່ງຊ່ວຍທ່ານ.”

## ຊອບທັມ, ຄວາມຊອບ ທັມ

### ນິຍາມ

ຄຳ ວ່າ "ຊອບ ທັມ" ແລະ "ຄວາມຊອບ ທັມ" ໝາຍ ເຖິງຄວາມດີ, ຄວາມຍຸດຕິທັມ, ຄວາມສັດຊື່ແລະຄວາມຮັກຂອງພຣະເຈົ້າ. ເພາະວ່າພຣະເຈົ້າທ່ຽງ ທັມ ລາວຕ້ອງຕັດສິນລົງໂທດບາບ.

- ຂໍ້ກຳນົດເຫຼົ່ານີ້ຍັງຖືກນຳໃຊ້ເລື້ອຍໆເພື່ອພັນລະນາເຖິງຄົນທີ່ເຊື່ອຟັງພຣະເຈົ້າແລະມີສິນລະທັມ. ເຖິງຢ່າງໃດກໍ່ຕາມ, ຍ້ອນວ່າທຸກຄົນໄດ້ເຮັດບາບ, ບໍ່ມີໃຜຍົກເວັ້ນພຣະເຈົ້າທີ່ຊອບທັມໝົດ.
- ຕົວຢ່າງຂອງຄົນທີ່ພຣະຄັມພີເອີ້ນວ່າ "ຊອບທັມ" ປະກອບມີ ໂນອາ, ໂຢບ, ອັບຣາຮາມ, ຊາກາລີຢາ, ແລະເອລີຊາເບັດ.
- ເມື່ອຜູ້ຄົນໄວ້ວາງໃຈໃນພຣະເຢຊູເພື່ອຊ່ວຍພວກເຂົາ, ພຣະເຈົ້າໄດ້ ຊໍາ ລະລ້າງພວກເຂົາຈາກບາບຂອງພວກເຂົາແລະປະກາດວ່າພວກເຂົາເປັນຄົນຊອບທັມ ໂດຍອີງໃສ່ຄວາມຊອບທັມ ຂອງພຣະເຢຊູ.

### ຄຳແນະນຳໃນການແປ

- ເມື່ອກ່າວເຖິງພຣະເຈົ້າ, ຄຳວ່າ "ຊອບທັມ" ສາມາດຖືກແປວ່າ "ດີເລີດແລະທ່ຽງທັມ" ຫລື "ປະຕິບັດຢ່າງຖືກຕ້ອງສະເໝີ ໄປ."
- "ຄວາມຊອບທັມ" ຂອງພຣະເຈົ້າຍັງສາມາດແປເປັນ "ຄວາມຊື່ສັດທີ່ສົມບູນແບບແລະຄວາມດີງາມ."


generated on Thu Jul 10 08:45:04 2025

- ເມື່ອເວົ້າເຖິງຄົນທີ່ເຊື່ອຟັງພຣະເຈົ້າ, ຄຳວ່າ "ຊອບທັມ" ຍັງສາມາດແປວ່າ "ສົມບັດສິນທັມ" ຫລື "ທ່ຽງທັມ" ຫລື "ດຳລົງຊີວິດທີ່ເຮັດໃຫ້ພຣະເຈົ້າພໍໃຈ."
- ປະໂຫຍກທີ່ວ່າ "ຄົນຊອບທັມ" ຍັງສາມາດແປເປັ້ນ "ຄົນຊອບທັມ" ຫລື "ຄົນທີ່ເຄົາລົບພຣະເຈົ້າ."
- ອີງຕາມສະພາບການ, "ຄວາມຊອບທັມ" ຍັງສາມາດແປດ້ວຍ ຄຳສັບຫລືປະໂຫຍກທີ່ມີຄວາມໝາຍວ່າ "ຄວາມດີ" ຫລື "ດີເລີດຕໍ່ໜ້າພຣະເຈົ້າ" ຫລື "ປະຕິບັດໃນທາງທີ່ຖືກຕ້ອງໂດຍການເຊື່ອຟັງພຣະເຈົ້າ" ຫລື "ເຮັດດີຢ່າງສົມບູນ
- ບາງຄັ້ງ "ຄົນຊອບທັມ" ຖືກໃຊ້ເປັ້ນຕົວເລກແລະໝາຍເຖິງ "ຄົນທີ່ຄິດວ່າຕົນເປັ້ນຄົນດີ" ຫລື "ຄົນທີ່ເບິ່ງຄືວ່າເປັ້ນຄົນຊອບທັມ."

## ຊະນິດ,ຫລາຍຊະນິດ

### ນິຍາມ

ຄຳວ່າ "ຊະນິດ" ແລະ "ຫລາຍຊະນິດ" ອ້າງເຖິງກຸ່ມຫລືປະເພດຂອງສິ່ງຕ່າງໆທີ່ກ່ຽວຂ້ອງກັນໂດຍຄຖນລັກສະນະພິເສດຮ່ວມກັນ.

- ໃນພຣະຄຳພີ ຄຳນີ້ໃຊ້ສະເພາະເພື່ອອ້າງອີງປະເພດທີ່ແຕກຕ່າງກັນຂອງຕົ້ນໄມ້ແລະສັດຕ່າງໆ ທີ່ພຣະເຈົ້າຊົງເນຣະມິດສ້າງໂລກນີ.
- ຫລາຍເທື່ອທີ່ມີຄວາມແຕກຕ່າງຫລາກຫລາຍຫລືຫລາຍສາຍພັນ ທີ່ຢູ່ໃນແຕ່ລະ "ຊະນິດ" ຕົວຢ່າງເຊັ່ນ ມ້າ, ມ້າລາຍ ແລະລາ ລ້ວນເປັ້ນສັດທີ່ຢູ່ໃນ "ຊະນິດ" ດຽວກັນ ແຕ່ແຕກຕ່າງສາຍພັນ.
- ສິ່ງສຳຄັນຄືການຈຳແນກແຕ່ລະ "ຊະນິດ" ອອກເປັ້ນກຸ່ມຕ່າງຫາກຊຶ່ງຫມາຍເຖິງສະມາຊິກຂອງກຸ່ມນັ້ນທີ່ສາມາດແຜ່ພັນສິ່ງທີ່ເປັ້ນ "ຊະນິດ" ດຽວກັນໄດ້ຫລາຍຂຶ້ນອີກ ສະມາຊິກຕ່າງສາຍພັນບໍ່ສາມາດເຮັດສິ່ງນີ້ຕໍ່ກັນ.

### ຄຳແນະນຳໃນການແປ

- ວິທີການແປ ຄຳ ສັບນີ້ອາດປະກອບມີ "ຊະນິດ" ຫຼື "ຊັ້ນ" ຫລື "ກຸ່ມ" ຫຼື "ສັດ".

## ຊະເຕຟາໂນ

### ຂ້ເທັດຈິງ

ຊະເຕຟາໂນໄດ້ຖືກຈົດຈຳຫລາຍທີ່ສຸດວ່າເປັ້ນຄຣິສຕຽນຄົນທຳອິດ ທີ່ຖືກຂ້າຕາຍເພາະເຊື່ອໃນພຣະເຢຊູ,
ຄວາມຈິງແລ້ວກ່ຽວກັບຊີວິດແລະຄວາມຕາຍຂອງລາວໄດ້ຖືກບັນທຶກໄວ້ໃນພຣະທຳກິດຈະການ.

- ຊະເຕຟາໂນໄດ້ຮັບການແຕ່ງຕັ້ງໂດຍຄຣິສຈັກຍຸກທຳອິດໃນກຸງເຢຣູຊາເລັ້ມໃຫ້ຮັບໃຊ້ຄຣິສຕຽນໃນຖານະເປັ້ນຜູ້ປົກຄອງເພື່ອຈັດຕຽມອາຫານສຳລັບແມ່ຫ
- ຊາວຢິວບາງຄົນໄດ້ກ່າວຫາຊະເຕຟາໂນໂດຍບໍ່ແມ່ນຄວາມຈິງ ວ່າລາວຕໍ່ຕ້ານພຣະເຈົ້າແລະພຣະບັນຍັດຂອງພຣະເຈົ້າທີ່ໂມເຊນຳມາ.
- ຊະເຕຟາໂນໄດ້ເວົ້າຄວາມຈິງຢ່າງກ້າຫານກ່ຽວກັບພຣະເຢຊູພຣະເມຊີອາ
  ເລີ້ມຕົ້ນຈາກປະຫວັດສາດຂອງການປະຕິບັດຂອງພຣະເຈົ້າກັບປະຊາຊົນອິດສະຣາເອນ.
- ຜູ້ນຳຊາວຢິວໂກດແຄ້ນຊະເຕຟາໂນຫລາຍແລະພວກເຂົາໄດ້ແກວ່ງກ້ອນຫີນໃສ່ລາວຢູ່ນອກເມືອງຈົນຕາຍ.
- ການຖືກປະຫານຊີວິດຂອງລາວໄດ້ຖືກເປັ້ນພະຍານໂດຍໂຊໂລ, ເຊິ່ງຕໍ່ມາໄດ້ເປັ້ນອັກຄະສາວົກໂປໂລ.
- ຊະເຕຟາໂນຍັງເປັ້ນຄົນທີ່ຮູ້ຈັກກັນດີດ້ວຍຄຳເວົ້າສຸດທ້າຍຂອງລາວກ່ອນທີ່ລາວຈະເສຍຊີວິດວ່າ "ອົງພຣະຜູ້ຊ່ວຍໃຫ້ລອດ
  ຂໍໂຜດຢ່າຊົງຖືໂທດພວກເຂົາເພາະບາບນີ".

## ຊັກຂ່າຍ

### ຂ້ເທັດຈິງ

ຊັກຂ່າຍ ເປັ້ນຄົນເກັບພາສີຈາກ ທີ່ເມືອງເຢຣິໂກ
ຜູ້ໄດ້ປີນຂຶ້ນຕົ້ນໄມ້ເພື່ອຈະສາມາດຫລຽວເຫັນພຣະເຢຊູຜູ້ທີ່ຖືກລ້ອມຮອບໂດຍຝູງປະຊາຊົນຈຳນວນຫລວງຫລາຍ

- ຊັກຂ່າຍ ໄດ້ຖືກປ່ຽນຊີໄປຢ່າງສິ້ນເຊີງເມື່ອລາວໄດ້ເຊື່ອໃນພຣະເຢຊູ
- ລາວໄດ້ສຳນຶກຜິດໃນຄວາມບາບຂອງລາວທີ່ໄດ້ຫລອກລວງປະຊາຊົນ

ແລະໄດ້ສັນຍາວ່າຈະໃຫ້ຊັບສົມບັດຂອງລາວເຄິ່ງນຶ່ງແກ່ຄົນຍາກຈົນ

- ລາວຍັງໄດ້ສັນຍາວ່າລາວຈະຈ່າຍເງິນຄືນໃຫ້ກັບປະຊາຊົນຈຳນວນສີ່ເທົ່າຕາມຈຳນວນທີ່ລາວໄດ້ເກັບພາສີຂອງພວກເຂົາເກີນຈຳນວນ


generated on Thu Jul 10 08:45:04 2025

## ຊາດົກ

### ຂໍ້ເທັດຈິງ

ຊາດົກເປັນຊື່ຂອງມະຫາປະໂລຫິດຄົນສຳຄັນໃນອິດສະຣາເອນໃນຣັດສະໄໝການປົກຄອງຂອງກະສັດດາວິດ.

- ເມື່ອອັບຊາໂລມໄດ້ກະບົດຕໍ່ກະສັດດາວິດ ຊາດົກໄດ້ສະນັບສະໜຸນດາວິດແລະໄດ້ຊ່ວຍນຳຫີບພັນທະສັນຍາ ໄປຍັງກຸງເຢຣູຊາເລັມ.
- ຫລາຍປີຕໍ່ມາລາວໄດ້ມີສ່ວນຮ່ວມໃນພິທີສະຖາປະນາໂຊໂລໂມນ ລູກຊາຍຂອງດາວິດໃຫ້ເປັນກະສັດ.
- ຊາຍສອງຄົນທີ່ຕ່າງກັນ ທີ່ມີຊື່ຊາດົກໄດ້ຊ່ວຍສ້າງກຳແພງກຸງເຢຣູຊາເລັມຂຶ້ນໃຫມ່ໃນຊ່ວງເວລາຂອງເນເຫມີ.
- ຊາດົກເປັນຊື່ຂອງປູ່ ຂອງກະສັດໂຍທາມ.

## ຊາຕານ ກຳນົດ ຖືກກຳນົດໄວ້ແລ້ວ

### ນິຍາມ

ຄຳວ່າ"ຊາຕານ" ອ້າງເຖິງ ສິ່ງທີ່ຈະເກີດຂຶ້ນ ກັບຜູ້ຄົນໃນອະນາຄົດ ຖ້າມີຄົນ "ຖືກກຳນົດ" ໃຫ້ເຮັດບາງສິ່ງ ກໍຫມາຍຄວາມວ່າ
ສິ່ງທີ່ຄົນນັ້ນຈະເຮັດ ໃນອະນາຄົດ ໄດ້ຮັບການຕັດສິນໃຈ ໂດຍພຣະເຈົ້າ.

- ເມື່ອພຣະເຈົ້າ "ກຳນົດ" ປະເທດຫນຶ່ງ ສຳຫລັບຄວາມໂກດຮ້າຍ

ຊຶ່ງຫມາຍຄວາມວ່າ ພຣະອົງ ຊົງໄດ້ຕັດສິນໃຈ ຫລື ເລືອກທີ່ຈະລົງໂທດປະເທດນັ້ນ ເພາະບາບ ຂອງພວກເຂົາ.

- ຢູດາໄດ້"ຖືກກຳນົດ" ສຳຫລັບຄວາມພິນາດ ຊຶ່ງຫມາຍຄວາມວ່າ ພຣະເຈົ້າ ຊົງຕັດສິນໃຈ ວ່າ ຢູດາ ຈະພິນາດ
  ເພາະການຫໍຣະຍົດຂອງເຂົາ
- ທຸກຄົນມີຈຸດສຸດທ້າຍ ຄວາມເປັນໄປ ຂອງຊີວິດກຳນົດມາ

ຕລອດໄປ ບໍ່ວ່າຈະຢູ່ສະຫວັນ ຫລື ຢູ່ນາຣົກ ຢ່າງໃດຢ່າງຫນຶ່ງ.

- ເມື່ອຜູ້ຜ້ຂຽນ ປັນຍາຈານ ກ່າວວ່າ ປາຍທາງ ຂອງທຸກຄົນ

ເຫມືອນກັນ ເຂົາຫມາຍຄວາມວ່າ ທຸກຄົນຕ້ອງຕາຍໃນທີ່ສຸດ.

### ຄຳແນະນຳໃນການແປ

- ຄຳເວົ້າ "ທ່ານຖືກກຳນົດ ໃຫ້ໄດ້ຮັບການໂກດຮ້າຍ" ອາດແປເປັ້ນ, "ຕັດສິນໃຈວ່າ ທ່ານຈະຖືກລົງໂທດ"ຫລື ກຳນົດວ່າ
  ທ່ານຈະໄດ້ຮັບຄວາມໂກດຮ້າຍຂອງເຮົາ."
- " ຄຳກ່າວແບບ ປຽບທຽບ ວ່າ "ພວກເຂົາຖືກກຳນົດ ໄວ້ສຳຫລັບດາບ" ສາມາດແປໄດ້ວ່າ "ພຣະເຈົ້າ ຊົງໄດ້ຕັດສິນວ່າ

ພວກເຂົາຈະຖືກທຳລາຍ"ໂດຍພວກສັດຕູ ຜູ້ທີ່ຈະຂ້າພວກເຂົາ ດ້ວຍດາບ"

- ຄຳເວົ້າ ທີ່ວ່າ "ທ່ານໄດ້ຖືກກຳນົດໃວ້ ສຳຫລັບ" ອາດແປດ້ວຍຄຳເວົ້າເຊັ່ນ "ພຣະເຈົ້າ ຊົງໄດ້ກ່າວວ່າ ທ່ານຈະເປັນເຊັ່ນນັ້ນ".
- ຂຶ້ນຢູ່ບໍຣິບົດ"ຊາຕານ"ອາດຖືກແປເປັ້ນ"ຈຸດສຸດທ້າຍ" ຫລື "ສິ່ງຈະເກີດຂຶ້ນ ໃນຕອນສຸດທ້າຍ" ຫລື "ສິ່ງທີ ພຣະເຈົ້າ ຊົງໄດ້

ຕັດສິນໃຈ ວ່າຈະເກີດຂຶ້ນ.

## ຊາຕານ ,ມານ, ຜູ້ຊົ່ວຮ້າຍ

### ນິຍາມ

ມານເປັ້ນວິນຍານຫນຶ່ງທີ່ພຣະເຈົ້າໄດ້ຊົງເນລະມິດສ້າງຂຶ້ນມາ(ຊຶ່ງເຄີຍເປັ້ນທູດສະຫວັນທີ່ມີຕຳແຫນ່ງສູງ)ແຕ່ມັນໄດ້ກະບົດຕໍ່ພຣະເຈົ້າແລະກາຍມາເປັ້ນສັດຕູຂອງ
ມານຍັງຖືກເອີ້ນອີກຊື່ວ່າ"ຊາຕານ"ແລະ"ຜູ້ຊົ່ວຮ້າຍ

- ມານກ່ຽດຊັ່ງພຣະເຈົ້າແລະທຸກສິ່ງທີ່ພຣະເຈົ້າຊົງເນລະມິດສ້າງ ເພາະມັນຍາກແທນຕຳແຫນ່ງຂອງພຣະເຈົ້າ
  ແລະຍາກໄດ້ຮັບການນະມັດສະການເໝືອນກັບພຣະເຈົ້າ
- ຊາຕານທົດລອງມະນຸດໃຫ້ກະບົດຕໍ່ພຣະເຈົ້າ
- ພຣະເຈົ້າປະທານພຣະບຸດຂອງພຣະອົງ ຄືພຣະເຢຊູຄຣິດເຈົ້າເພື່ອຊ່ວຍກູ້ມະນຸດຈາກການຄວບຄຸມຂອງຊາຕານ
- ຊື່ຂອງ "ຊາຕານ"ມີຄວາມຫມາຍວ່າ"ປໍລະປັກ"ຫລື"ສັດຕູ"


generated on Thu Jul 10 08:45:04 2025

- ຄຳວ່າ "ມານ" ມີຄວາມຫມາຍວ່າ "ຜູ້ກ່າວໂທດ"

%ຄຳແນະນຳໃນການແປ

- ຄຳວ່າ"ມານ" ສາມາດແປວ່າ"ຜູ້ກ່າວໂທດ" ຫລື"ຜູ້ຊົ່ວຮ້າຍ"
- ຫລື"ເຈົ້າແຫ່ງວິນຍານຊົ່ວທັ້ງຫລາຍ "ຫລື" "ຫົວຫນ້າວິນຍານຊົ່ວ"
- ຊາຕານ "ສາມາດແປວ່າ "ຝ່າຍຕົງກັນຂ້າມ "ຫລື "ປໍລະປັກ"ຫລື "ຊື່ອື່ນໆທີ່ສະແດງວ່າມັນປັ່ນມານ
- ຄຳເຫລົ່ານີ້ຄວນແປໃຫ້ຕ່າງຈາກຄຳວ່າປີສາດແລະວິນຍານຊົ່ວ
- ໃຫ້ພິຈາລະນາວ່າຄຳເຫລົ່ານີ້ແປວ່າຢ່າງໃດໃນທ້ອງຖິ່ນຫລືພາສາກາງ

## ຊາມູເອນ

### ຂໍ້ເທັດຈິງ

ຊາມູເອນເປັນຜູ້ປະກາດພຣະທຳແລະເປັນຜູ້ປົກຄອງຄົນສຸດທ້າຍຂອງອິດສະຣາເອນ
ເພິ່ນໄດ້ແຕ່ງຕັ້ງທັ້ງຊາອູນແລະດາວິດໃຫ້ເປັນກະສັດເໜືອອິດສະຣາເອນ

- ຊາມູເອນໄດ້ເກີດມາຈາກເອນການາແລະນາງຮັນນາໃນເມືອງຣາມາ
- ນາງຮັນນາເປັນຍິງໝັ້ນດັ່ງນັ້ນນາງຈຶ່ງອະທິຖານຢ່າງສັດຊື
  ຕໍ່ພຣະເຈົ້າແລ້ວພຣະເຈົ້າໄດ້ປະທານລູກຊາຍໃຫ້ແກ່ນາງຊຶ່ງຊາມູເອນກໍເປັນຄຳຕອບທີ່ໄດ້ອະທິຖານໄວ້.
- ນາງຮັນນາໄດ້ສັນຍາໄວ້ວ່າຫາກລຸກໄດ້ເກີດມາຕາມຄຳອະທິຖານຢ່າງບໍ່ຄາດຫວັງຂອງຮັນນາທີ່ພຣະເຈົ້າໄດ້ປະທານບຸດຊາຍໃຫ້ແກ່ນາງ
  ເມື່ອຄຳອະທິຖານໄດ້ຮັບຄຳຕອບ ນາງຈະຖະຫວາຍລູກຂອງນາງໃຫ້ແດ່ພຣະເຈົ້າຢາເວ.
- ເມື່ອຊາມູເອນຍັງເປັນເດັກ
  ນາງຮັນນາໄດ້ສົ່ງຊາມູເອນໃຫ້ໄປຊ່ວຍປະໂລຫິດເອລີໃນພຣະວິຫານເພື່ອເຮັດໃຫ້ຄຳໝັ້ນສັນຍາຂອງນາງຕໍ່ພຣະເຈົ້າເປັນຈິງ.
- ພຣະເຈົ້າໄດ້ຊົງແຕ່ງຕັ້ງຊູາມູເອນໃຫ້ເປັນຜູ້ປະກາດພຣະທຳທີ່ຍິ່ງໃຫຍ່ສຳລັບພຣະອົງ.

## ຊາຣາ ,ຊາຣາຍ

### ຂໍ້ເທັດຈິງ

- ຊາຣາເປັນເມຍຂອງອັບຣາຮາມ
- ຊື່ເດີມຂອງນາງຄື"ຊາຣາຍ"ແຕ່ພຣະເຈົ້າຊົງປ່ຽນຊື່ໃຫ້ນາງໃຫມ່ວ່າ"ຊາຣາ"
- ຊາຣາໃຫ້ກຳເນີດລູກຊາຍຕາມທີ່ພຣະເຈົ້າຊົງໃຫ້ພຣະສັນຍາໄວ້ກັບນາງແລະອັບຣາຮາມ

## ຊາລອນ, ທົ່ງພຽງຂອງ ຊາລອນ

### ຂໍ້ເທັດຈິງ

ຊາລອນ ແມ່ນຊື່ຂອງພື້ນທີ່ຮາບພຽງແລະອຸດົມສົມບູນຂອງເນື້ອທີ່ດິນຕາມຊາຍຝັ່ງທະເລ ເມດິເຕລະເນຍ, ທາງທິດໃຕ້ຂອງ
ເມົາຄາເມ.ມັນຍັງມີຊື່ວ່າ "ທົ່ງພຽງຊາລອນ".

- ມີຫລາຍເມືອງທີ່ກ່າວເຖິງໃນພຣະຄຳພີຕັ້ງຢູ່ເທິງທົ່ງພຽງຊາຊອນ, ລວມທັ້ງເມືອງຢົບຟາ, ລິດດາ, ແລະເມືອງຄາຊີລາ.
- ສິ່ງນີ້ອາດຈະແປເປັນ "ທົ່ງພຽງທີ່ເອີ້ນວ່າ Sharon" ຫຼື "ທົ່ງພຽງຊາລອນ."
- ຄົນທີ່ອາໄສຢູ່ໃນເຂດ ຊາລອນ ຖືກເອີ້ນວ່າ "ທົ່ງພຽງຂອງເຊລອນ."

## ຊາວຊີໂດນ

### ຂໍ້ເທັດຈິງ

ຊາວຊີໂດນເປັນລູກກົກຂອງການາອານ ຍັງມີເມືອງຂອງຄົນການາອານທີ່ເອີ້ນວ່າຊີໂດນດ້ວຍ,
ເມືອງນີ້ອາດຈະຕັ້ງຊື່ຕາມລູກຊາຍຂອງການາອານ.

- ເມືອງຊີໂດນຕັ້ງຢູ່ຫາງທິດຕະເວັນຕົກຊ່ຽງເໜືອຂອງອິດສະຣາເອນເທິງຊາຍຝັ່ງທະເລເມດິເຕເຣເນ ປະຈຸບັນນີ້ເປັນປະເທດ ເລບານອນ.
- "ຊາວຊີໂດນ" ແມ່ນກຸ່ມຊາວຝີນີເຊຍທີ່ອາໃສຢູ່ໃນເມືອງຊີໂດນບູຮານແລະໃນແຖບບໍລິເວນອ້ອມຮອບນັ້ນ.
- ໃນພຣະຄຳພີ ຊີໂດນມີຄວາມສຳພັນທີ່ດີກັບເມືອງຫາຍ, ແລະຄົນທັ້ງສອງເມືອງນີ້ກໍມີຊື່ສຽງໂດ່ງດັງໃນການປະພຶດຜິດສິນລະທຳ.


generated on Thu Jul 10 08:45:04 2025

## ຊາວປະມົງ, ຄົນຫາປາ

### ນິຍາມ

ຊາວປະມົງຄືຄົນທີ່ຫາຈັບປາຈາກແມ່ນ້ຳເພື່ອຫາເງິນ. ໃນພັນທະສັນຍາໃໝ່, ຊາວປະມົງໃຊ້ອວນໃຫຍ່ເພື່ອຈັບປາ. ຄຳວ່າ "ຄົນຫາປາ" ເປັນຊື່ເອີ້ນອີກຊື່ໜຶ່ງສຳລັບຊາວປະມົງ.

- ເປໂຕແລະອັກຄະທູດຄົນອື່ນໆ ທຳໆງານເປັນຊາວປະມົງກ່ອນທີ່ພຣະເຢຊູຈະຊົງເອີ້ນພວກເຂົາ.
- ດິນແດນຂອງຊົນຊາດອິສະຣາເອນຢູ່ໃກ້ນ້ຳ, ພຣະຄຳພີມີການອ້າງອີງຢ່າງຫລວງຫລາຍໃນສ່ວນທີ່ກ່ຽວຂ້ອງກັບປາແລະຊາວປະມົງ.
- ຄຳນີ້ສາມາດແປໄດ້ອີກດ້ວຍປະໂຫຍກເຊັ່ນ, "ຄົນທີ່ຈັບປາ" ຫລື "ຄົນທີ່ຫາເງິນໂດຍການຈັບປາ."

## ຊາວຟີລິດສະຕິນ

### ຂໍ້ເທັດຈິງ

ຊາວຟີລິດສະຕິນແມ່ນກຸ່ມຊົນຊາດຊຶ່ງໄດ້ຄອບຄອງແຄວ້ນຟີລິດສະຕິນຊຶ່ງຕັ້ງຢູ່ຕິດກັບຊາຍຝັ່ງຂອງທະເລເມດິເຕເລເນ
ຄຳວ່າຟີລິດສະຕິນນັ້ນມີຄວາມໝາຍ ວ່າ "ປະຊາຊົນແຫ່ງທະເລ"

- ເມືອງໃຫຍ່ຟີລິດສະຕິນ ມີເມືອງອັດໂດດ ເມືອງອັດເຄໂລນ ເມືອງເອໂຄນ ເມືອງກັດ ແລະເມືອງກາຊາ
- ເມືອງອັດໂດດຢູ່ທາງຕອນເໜືອຂອງຟີລິດສະຕິນ ສ່ວນເມືອງກາຊານັ້ນຢູ່ທາງຕອນໃຕ້
- ຊາວຟີລິດສະຕິນ ມີຄວາມຂຳນານການສູ້ລົບກັບຊາວອິດສະລາເອນເປັນເວລາຫຼາຍປີ
- ແຊມຊັນເປັນນັກລົບທີ່ມີຊື່ສຽງທີ່ໄດ້ກໍ່ການຕໍ່ສູ້ກັບຊາວຟີລິດສະຕິນໂດຍໃຊ້ພະລັງເໜືອທຳມະຊາດທີ່ພຣະເຈົ້າປະທານໃຫ້
- ກະສັດດາວິດໄດ້ນຳກອງທັບໃນການສູ້ລົບກັບຊາວຟີລິດສະຕິນຫລາຍເທື່ອ ນັບຕັ້ງແຕ່ເປັນໜຸ່ມມາ
  ພຣະອົງໄດ້ປາບນັກລົບຊາວຟີລິດສະຕິນຊື່ວ່າໂກລີອາດ

## ຊາວເມເດຍ, ເມເດຍ

### ຂໍ້ເທັດຈິງ

ເມເດຍ ເປັນຈັກກະພັດບູຮານທີ່ຕັ້ງຢູ່ທາງທິດຕາເວັນອອກຂອງອັດຊີເຣຍ ແລະ ບາບີໂລນ, ແລະທາງທິດເໜືອຂອງເອລາມແລະເປີເຊຍ.
ປະຊາຊົນທີ່ອາໃສຢູ່ໃນຈັກກະພັດເມເດຍ ຈະຖືກເອີ້ນວ່າເປັນ "ຊາວເມເດຍ."

- ເມເດຍ ເປັນເຂດແດນທີ່ກວມເອົາເນື້ອທີ່ຂອງປະເທດຕຸຣະກີ, ອີຣ່ານ, ຊີເຣຍ, ອີຣັກ, ແລະ ອັຟການິສະຖານ.
- ຊາວເມເດຍ ມີຄວາມສຳພັນໃກ້ຊິດກັບຊາວເປີເຊຍ ແລະທັ້ງສອງຈັກກະພັດນີ້ ໄດ້ລວມກຳລັງທະຫານເຂົ້າກັນ
  ເພື່ອເອົາຊະນະຈັກກະພັດບາບີໂລນ.
- ດາຣີອຸດ ຊາວເມເດຍ ໄດ້ໄປຮຸກຮານບາບີໂລນ ໃນໄລຍະເວລາທີ່ຜູ້ທຳນວຍການີເອນ ໄດ້ອາໃສຢູ່ທີ່ນັ້ນ.

## ຊາອູນ, (ພັນທະສັນຍາເດີມ)

### ຂໍ້ເທັດຈິງ

ຊາອູນເປັນຜູ້ຊາຍ ເປັນຊາວອິດສະຣາເອນຄົນໜຶ່ງ ຜູ້ຊຶ່ງພຣະເຈົ້າໄດ້ຊົງເລືອກໃຫ້ເປັນກະສັດຄົນທຳອິດຂອງຊົນຊາດອິດສະຣາເອນ

- ຊາອູນເປັນຄົນທີ່ມີຮູບຮ່າງສູງແລະໜ້າຕາງາມ ແລະເປັນທະຫານທີ່ເກັ່ງກ້າ
  ເຂົາເປັນຄົນປະເພດທີ່ຊົນຊາດອິດສະຣາເອນຕ້ອງການໃຫ້ເປັນກະສັດຂອງພວກເຂົາ
- ເຖິງແມ່ນວ່າເພິ່ນໄດ້ຮັບໃຊ້ພຣະເຈົ້າໃນຕອນແລກໃດ ແຕ່ຕໍ່ມາຊາອູນກາຍເປັນຄົນຈອງຫອງແລະບໍ່ເຊື່ອຟັງພຣະເຈົ້າ
  ຜົນທີ່ຕາມມາຄືພຣະເຈົ້າໄດ້ຊົງແຕ່ງຕັ້ງດາວິດໃຫ້ເປັນກະສັດແທນທີ່ຊາອູນແລະພຣະເຈົ້າໃຫ້ຊາອູນຖືກຂ້າຕາຍໃນສະນາມຮົບ
- ໃນພຣະສັນຍາໃຫມ່ ມີຜູ້ຊາຍຊາວຢິວຄົນໜຶ່ງຊື່ວ່າໂຊໂລ
  ທີ່ເປັນທີ່ຮູ້ຈັກກັນໃນນາມໂປໂລແລະໄດ້ກາຍມາເປັນອັກຄະສາວົກຂອງພຣະເຢຊູຄຣິດ


generated on Thu Jul 10 08:45:04 2025

## ຊຳລະໃຫ້ບໍລິສຸດ , ການຊຳລະໃຫ້ບໍລິສຸດ

### ນິຍາມ

ການຊຳລະໃຫ້ບໍລິສຸດຄືການແຍກອອກຫຼືເຮັດໃຫ້ບໍລິສຸດ ການຊຳລະໃຫ້ບໍລິສຸດເປັນຂະບວນການທີ່ຈະເຮັດໃຫ້ບໍລິສຸດ.

- ໃນພຣະສັນຍາເດີມປະຊາຊົນບາງຄົນ ແລະບາງສິ່ງໄດ້ຮັບການຊຳລະໃຫ້ບໍລິສຸດ ຫຼືໄດ້ແຍກອອກເພື່ອຮັບໃຊ້ພຣະເຈົ້າ.
- ໃນພຣະສັນຍາໃຫມ່ ສອນວ່າພຣະເຈົ້າຊົງຊຳລະປະຊາ ກອບທີ່ເຊື່ອໃນພຣະເຢຊູຄຣິດເຈົ້າໃຫ້ບໍລິສຸດ ເພື່ອວ່າພຣະອົງຊົງຊຳລະພວກເຂົາໃຫ້ບໍລິສຸດແລະແຍກພວກເຂົາອອກມາ ເພື່ອໃຫ້ຮັບໃຊ້ພຣະອົງ.
- ບັນດາຜູ້ທີ່ເຊື່ອ ໃນພຣະເຢຊູ ໄດ້ຮັບຄຳບັນຊາໃຫ້ຮັບການຊຳລະຕົນໃຫ້ບໍລິສຸດຕໍ່ພຣະເຈົ້າ ເພື່ອໃຫ້ທຸກສິ່ງທີ່ພວກເຂົາກະທຳບໍລິສຸດ.

### ຄຳແນະນຳໃນການແປ

- ຂຶ້ນຢູ່ກັບກໍລະນີນັ້ນໆ ຄຳວ່າ "ຊຳລະໃຫ້ບໍລິສຸດ" ສາມາດແປວ່າ "ຖືກແຍກອອກ" ຫຼື "ເຮັດໃຫ້ສັກສິດ" ຫຼື "ເຮັດໃຫ້ບໍລິສຸດ".
- ເມື່ອປະຊາຊົນຊຳລະຕົວໃຫ້ບໍລິສຸດ ໝາຍຄວາມວ່າພວກເຂົາບໍລິສຸດແລະອຸທິດຖະຫວາຍຕົວຕໍ່ການຮັບໃຊ້ພຣະເຈົ້າ ຫຼາຍຄັ້ງຄຳວ່າ "ການປຸກເສກ" ກໍໄດ້ໃຊ້ໃນພຣະຄຳພີສຳລັບຄວາມໝາຍນີ້ດ້ວຍ.
- ດ້ວຍຄວາມໝາຍຂອງຄຳວ່າ "ການປຸກເສກ" ຄຳນີ້ຄວນແປວ່າ "ອຸທິດຕົວໃຫ້ບາງຄົນ".

## ຊີນາ

### ຂໍ້ເທັດຈິງ

ຊີນາໝາຍຄວາມວ່າ "ປະເທດທີ່ມີແມ່ນ້ຳສອງສາຍ" ແລະເປັນຊື່ຂອງພື້ນທີ່ຮາບພຽງຫລືແຄ້ວນທີ່ຢູ່ທາງໃຕ້ຂອງເມໂສໂປຕາເມຍ.

- ຊີນາ ຕໍ່ມາ ໄດ້ກາຍເປັນທີ່ຮູ້ຈັກກັນວ່າ "ເຄນເດຍ" ແລະຕໍ່ມາເປັນ, "ບາບີໂລນ."
- ຄົນສະໄໝບູຮານອາໄສຢູ່ໃນເມືອງ ບາເບນ ໃນທີ່ຮາບພຽງຂອງຊີນາໄດ້ສ້າງຫໍຄອຍທີ່ສູງເພື່ອໃຫ້ພວກເຂົາມີຊື່ສຽງ.
- ຄົນລຸ່ນຕໍ່ມາອີກຫລາຍຊົ່ວຄົນ, ບັນພະບຸລຸດຂອງຊາວຢິວຄື ອັບຣາຮາມໄດ້ອາໄສຢູ່ທີ່ເມືອງອູເຣໃນແຄ້ວນນີ ທີ່ເອີ້ນຕາມເວລານັ້ນວ່າ "ເຄນເດຍ."

## ຊີນາຍ, ພູເຂົາຊີນາຍ

### ຂໍ້ເທັດຈິງ

ພູເຂົາຊີນາຍເປັນຊື່ຂອງພູເຂົາທີ່ອາດຈະຢູ່ທາງສ່ວນທາງພາກໃຕ້ທີ່ປະຈຸບັນນີ້ເອີ້ນວ່າຄາບທະເລຊີນາຍ. ແລະເປັນທີ່ຮູ້ຈັກກັນໃນຊື່ "ພູເຂົາໂຮເຣບ." ດ້ວຍ

- ພູເຂົາຊີນາຍເປັນສ່ວນໜຶ່ງຂອງພູເຂົາທະເລຊາຍ, ທີ່ມີຂະໜາດໃຫຍ່.
- ຊາວອິດສະຣາເອນໄດ້ມາຍັງພູເຂົາຊີນາຍໃນຂະນະທີ່ພວກເຂົາເດີນທາງອອກຈາກເອຢິບເພື່ອໄປຢັງແຜ່ນດິນທີ່ຊົງສັນຍາ.
- ພຣະເຈົ້າໄດ້ປະທານບັນຍັດສິບປະການເທິງພູເຂົາຊີນາຍ.

## ຊີລາ, ຊີວານັດ

### ຂໍ້ເທັດຈິງ

ຊີລາເປັນຜູ້ນຳຄົນໜຶ່ງໃນທ່າມກາງກຸ່ມຜູ້ເຊື່ອໃນນະຄອນເຢຣູຊາເລັ້ມ.

- ຜູ້ປົກຄອງທັ້ງຫລາຍຂອງຄຣິສຕະຈັກໃນນະຄອນເຢຣູຊາເລັ້ມ ໄດ້ແຕ່ງຕັ້ງຊີລາໃຫ້ເດີນທາງໄປກັບໂປໂລແລະບາຣະນາບາເພື່ອນຳຈົດໝາຍໄປຍັງເມືອງອັນຕີໂອເຂຍ.
- ຕໍ່ມາຊີລາໄດ້ເດີນທາງຮ່ວມກັບອາຈານໂປໂລໄປຍັງເມືອງຕ່າງໆເພື່ອສອນຜູ້ຄົນໃນເລື່ອງພຣະເຢຊູ.
- ໂປໂລແລະຊີລາໄດ້ຖືກຂັງຄຸກໃນເມືອງຟີລິບປອຍ ພວກເຂົາໄດ້ສັນລະເສີນພຣະເຈົ້າໃນຂະນະທີ່ພວກເຂົາຕິດຄຸກຢູ່ນັ້ນ ແລະພຣະເຈົ້າໄດ້ຊົງປ່ອຍພວກເຂົາອອກຈາກຄຸກ ທະຫານເຝົ້າຄຸກຈຶ່ງກັບໃຈມາເປັນຄຣິສຕຽນ ເຊິ່ງພົບມາຈາກຄຳພະຍານຂອງພວກເຂົາ.


generated on Thu Jul 10 08:45:04 2025

## ຊີລີເຊຍ

### ຂໍ້ເທັດຈິງ

ຊີລີເຊຍເປັນແຄວ້ນນ້ອຍໆຂອງໂຣມັນຕັ້ງຢູ່ທາງພາກໃຕ້ ຊຶ່ງໃນປະຈຸບັນນີ້ເປັນປະເທດຕຸຣະກີ. ແຄວ້ນນີ້ຢູ່ຕິດກັບທະເລກີລີເກຍ.

- ອັກຄະສາວົກໂປໂລເປັນພົນລະເມືອງຂອງເມືອງທາຊັດທີ

ຕັ້ງຢູ່ໃນແຄວ້ນນຊີລີເຊຍ.

- ໂປໂລໃຊ້ເວລາຫລາຍປີໃນແຄ້ວນຊີລີເຊຍຫຼັງຈາກທີ່ທ່ານໄດ້ພົບກັບພຣະເຢຊູໃນຖະໜົນທີ່ໄປຍັງເມືອງດາມັສກັດ.
- ພວກຢິວບາງຄົນຈາກແຄ້ວນຊີລີເຊຍຢູ່ໃນພວກຄົນທີ່ປະເຊີນໜ້າກັບຊະເຕຟາໂນແລະຍຸຍົງໃຫ້ປະຊາຊົນເອົາກ້ອນຫີນແກວ່ງໃສ່ເຂົາຈົນຕາຍ.

## ຊີວິດ, ມີຊີວິດ, ການມີຊີວິດ, ການອາໄສຢູ່

### ນິຍາມ

ຂໍ້ກຳນົດທັງໝົດເຫຼົ່ານີ້ໝາຍເຖິງການມີຊີວິດທາງຮ່າງກາຍ, ບໍ່ແມ່ນການຕາຍ. ຄຳສັບເຫລົ່ານີ້ຍັງຖືກນຳ
ໃຊ້ເປັນຕົວເລກເພື່ອໝາຍເຖິງການມີຊີວິດທາງວິນຍານ. ຕໍ່ໄປນີ້ຈະເວົ້າເຖິງຄວາມໝາຍຂອງຊີວິດທາງຮ່າງກາຍແລະຊີວິດທາງວິນຍານ.

### ຄຳແນະນຳໃນການແປ

- ອີງຕາມສະພາບການ "ຊີວິດ" ສາມາດແປເປັນ "ການມີຊີວິດ " ຫລື " ຄົນ " ຫລື " ຈິດວິນຍານ " ຫຼື " ການເປັນ " ຫຼື " ປະສົບການ. "
- ຄຳວ່າ “ ມີຊີວິດ ” ສາມາດແປໄດ້ໂດຍ “ ຢູ່ ” ຫລື “ ອາໄສຢູ່ ” ຫລື “ ມີຢູ່. ”
- ສຳນວນທີ່ວ່າ " ສິ້ນສຸດຊີວິດຂອງລາວ " ສາມາດແປເປັນ " ໃນເວລາທີ່ລາວຢຸດດຳລົງຊີວິດ. "
- ສຳນວນທີ່ວ່າ " ໄວ້ຊີວິດຂອງພວກເຂົາເຈົ້າ " ສາມາດຖືກແປເປັນ " ອະນຸຍາດໃຫ້ພວກເຂົາມີຊີວິດຢູ່ " ຫຼື " ບໍ່ໄດ້ຂ້າພວກເຂົາ. "
- ສຳນວນທີ່ວ່າ " ພວກເຂົາໄດ້ສ່ຽງຊີວິດຂອງພວກເຂົາ " ສາມາດແປເປັນ "ພວກເຂົາວາງຕົວເອງຢູ່ໃນອັນຕະລາຍ" ຫຼື " ພວກເຂົາໄດ້ເຮັດບາງສິ່ງບາງຢ່າງທີ່ອາດເຮັດໃຫ້ພວກເຂົາຕາຍ."
- ເມື່ອຂໍ້ພຣະຄຳພີກ່າວເຖິງການມີຊີວິດທາງວິນຍານ, " ຊີວິດ " ສາມາດຖືກແປວ່າ " ຊີວິດທາງວິນຍານ" ຫລື " ຊີວິດນິລັນດອນ ", ຂຶ້ນກັບສະພາບການ.
- ແນວຄວາມຄິດຂອງ " ຊີວິດທາງວິນຍານ " ຍັງສາມາດຖືກແປວ່າ " ພຣະເຈົ້າເຮັດໃຫ້ພວກເຮົາມີຊີວິດຢູ່ໃນວິນຍານຂອງພວກເຮົາ " ຫລື " ຊີວິດໃໝ່ ໂດຍພຣະວິນຍານຂອງພຣະເຈົ້າ " ຫລື " ຖືກເຮັດໃຫ້ມີຊີວິດຢູ່ໃນຕົວເຮົາເອງພາຍໃນ."
- ອີງຕາມສະພາບການ, ສຳນວນທີ່ວ່າ " ໃຫ້ຊີວິດ " ກໍ່ອາດຈະຖືກແປເປັນ " ສາເຫດທີ່ຈະມີຊີວິດ " ຫລື " ໃຫ້ຊີວິດນິລັນດອນ " ຫລື " ສາເຫດທີ່ຈະມີຊີວິດຕະຫຼອດໄປ."

## ຊີເຄມ

### ຂໍ້ເທັດຈິງ

ຊີເຄມເປັນເມືອງທີ່ຢູ່ໃນການາອານເຊິ່ງຕັ້ງຢູ່ທາງພາກເໜືອຫ່າງຈາກເຢຣູຊາເລັມປະມານ 64 ກິໂລແມັດ
ຊີເຄມຍັງເປັນຊື່ຂອງຜູ້ຊາຍຄົນໜຶ່ງໃນພຣະຄຳພີເດີມ.

- ເມືອງຊີເຄມເປັນເມືອງທີ່ຢາໂຄບໄດ້ຕັ້ງຖິ່ນຖານຢູ່ຫລັງຈາກຄືນດີກັນກັບເອຊາວອ້າຍຂອງເຂົາ.
- ຢາໂຄບໄດ້ຊື້ທີ່ດິນຈາກລູກຊາຍຂອງຮາໂມຊາວຮີວີໃນເມືອງຊີເຄມ, ເຊິ່ງຕໍ່ມາກາຍເປັນທີ່ຝັງສົບຄອບຄົວຂອງເຂົາແລະເປັນສະຖານທີ່ ທີ່ລູກຊາຍທັ້ງຫລາຍຂອງຢາໂຄບໄດ້ຝັງເຂົາໄວ້.
- ຊີເຄມເປັນລູກຊາຍຂອງຮາໂມໄດ້ຂົ່ມຂືນດີນາລູກສາວຂອງຢາໂຄບ, ເຊິ່ງເປັນເຫດໃຫ້ລູກຊາຍຂອງຢາໂຄບຂ້າຜູ້ຊາຍໃນເມືອງຊີເຄມ.


generated on Thu Jul 10 08:45:04 2025

## ຊິເມອີ

### ຂ້ເທັດຈິງ

ຊິເມອີເປັນຊື່ຂອງຜູ້ຊາຍຫລາຍຄົນໃນພັນທະສັນຍາເດີມ.

- ຊິເມອີລູກຊາຍເກຣາ,
  ເປັນຊາວເບັນຢາມິນຜູ້ປ້ອຍດ່າກະສັດດາວິດແລະແກ່ວງກ້ອນຫີນໃສ່ພຣະອົງໃນຂະນະທີ່ພຣະອົງປ່ຽໜີອອກຈາກນະຄອນເຢຣູຊາເລັມ
  ຈາກການໄລ່ຕາມຂ້າຂອງອັບຊາໂລມລູກຊາຍຂອງພຣະອົງ.
- ໃນພັນທະສັນຍາເດີມຍັງມີປະໂຣຫິດຊາວເລວີຫລາຍຄົນທີ່ມີຊື່ວ່າ ຊິເມອີ.

## ຊິເມໂອນ

### ຂ້ເທັດຈິງ

ໃນພຣະຄຳພີ, ມີຜູ້ຊາຍຫຼາຍຄົນທີ່ຊື່ວ່າຊິເມໂອນ.

- ໃນພັນທະສັນຍາເດີມ, ລູກຊາຍຄົນທີ່ສອງຂອງຢາໂຄບ (ອິດສະຣາເອນ) ແລະເລອາກໍຊື່ຊິເມໂອນ.
  ບັນດາເຊື້ອສາຍຂອງທ່ານກາຍມາເປັນໜຶ່ງໃນອິດສະຣາເອນສິບສອງເຜົ່າ.
- ເຜົ່າຊິເມໂອນໄດ້ຄອບຄອງດິນແດນທີ່ຢູ່ທາງໃຕ້ສຸດໃນແຜ່ນດິນທີ່ຊົງສັນຍາຂອງການາອານ, ເທິງພື້ນທີ່ທີ່ເປັນສ່ວນນ້ອຍຂອງຢູດາ.
- ເມື່ອໂຢເຊບແລະມາຣີ ໄດ້ນຳພຣະກຸມມານເຢຊູໄປຢັງພຣະວິຫານໃນນະຄອນເຢຣູຊາເລັມເພື່ອຖວາຍພະອົງໃຫ້ແດ່ພຣະເຈົ້າ,
  ຊາຍຜູ້ອາວຸໂສທ່ານໜຶ່ງຊື່ຊິເມໂອນໄດ້ສັນລະເສີນພຣະເຈົ້າທີ່ຊົງໃຫ້ທ່ານໄດ້ເຫັນພຣະເມຊີອາ.

## ຊິເຣຍ

### ຂ້ເທັດຈິງ

ຊິເຣຍ ແມ່ນປະເທດທີ່ຕັ້ງຢູ່ທາງທິດຕາເວັນອອກສ່ຽງເໜືອ ຂອງອິດສະຣາເອນ. ໃນສະໄໝຂອງພຣະຄຳພີໃໝ່,
ມັນແມ່ນແຂວງໜຶ່ງທີ່ຢູ່ພາຍໃຕ້ການປົກຄອງຂອງຈັກກະພັດໂຣມ.

- ໃນສະໄໝພຣະຄຳພີເດີມ, ຊາວຊີເຣຍແມ່ນກອງທັບທະຫານທີ່ເຂັ້ມແຂງທີ່ເປັນສັດຕູຂອງຊາວອິດສະລາເອນ.
- ນາອມານເປັນຜູ້ບັນຊາການກອງທັບຊີເຣຍຜູ້ທີ່ເປັນພະຍາດຂີ้ທູດເຊິ່ງລາວໄດ້ຮັບການຮັກສາໂດຍຜູ້ປະກາດພຣະທຳເອລີຊາ.
- ຫຼາຍຄົນທີ່ອາໄສຢູ່ໃນປະເທດຊີເຣຍແມ່ນເຊື້ອສາຍຂອງອາຣາມ, ຜູ້ທີ່ໄດ້ສືບເຊື້ອສາຍມາຈາກເຊມລູກຊາຍຂອງໂນເອ.
- ເມືອງດາມາເຊເຊິ່ງເປັນເມືອງຫຼວງຂອງປະເທດຊີເຣຍຖືກກ່າວເຖິງຫຼາຍຄັ້ງໃນພຣະຄຳພີ.
- ໂປໂລໄດ້ໄປເມືອງດາມາເຊດ້ວຍແຜນການທີ່ຈະໄປຂົ່ມເຫັງຊາວຄຣິດສະຕຽນຢູ່ທີ່ນັ້ນ, ແຕ່ພຣະເຢຊູໄດ້ຢຸດຢັ້ງລາວໄວ້.

## ຊີໂມນພັກຊາດນິຍົມ

### ຂ້ເທັດຈິງ

ຊີໂມນເປັນໜຶ່ງໃນສາວົກຂອງພະເຢຊູ.

- ຊີໂມນຖືກເວົ້າເຖິງສາມເທື່ອໃນລາຍຊື່ສາວົກຂອງພະເຢຊູຄຣິດ, ແຕ່ມີນ້ອຍຄົນທີ່ຮູ້ກ່ຽວກັບເລື່ອງທ່ານ.
- ຊີໂມນເປັນໜຶ່ງໃນສິບເອັດຄົນທີ່ຮ່ວມອະທິຖານໃນນະຄອນເຢຣູຊາເລັມຫລັງຈາກທີ່ພຣະເຢຊູສະເດັດຂຶ້ນຟ້າສູ່ສະຫວັນແລ້ວ.
- ຄຳວ່າ"ຊາດນິຍົມ"ອາດໝາຍເຖິງວ່າຊີໂມນເປັນສະມາຊິກຂອງ"ພັກຊາດນິຍົມ"ຊຶ່ງເປັນພັກທາງສາສະໜາຂອງຊາວຢິວທີ່ກະຕືລືລົ້ນໃນການສະໜັບສະໜ
- ຫລື,ຄຳວ່າ, "ກະຕືລືລົ້ນ"ອາດໝາຍເຖິງ"ຄົນກະຕືລືລົ້ນ,"ທີ່ໝາຍເຖິງຄວາມກະຕືລືລົ້ນໃນຄວາມເຊື່ອທາງສາສນາຂອງຊີໂມນ.

## ຊີໂລ

### ຂ້ເທັດຈິງ

ຊີໂລເປັນເມືອງດ່ານໜ້າຂອງການາອານທີ່ຖືກພ່າຍແພ້ໃຫ້ກັບຊາວອິດສະຣາເອນໂດຍການນຳຂອງໂຢຊວຍ.

- ເມືອງຊີໂລຕັ້ງຢູ່ທາງທິດຕາເວັນຕົກຂອງແມ່ນ້ຳຈໍແດນແລະຕະເວັນອອກຊ່ຽງເໜືອຂອງເມືອງເບັດເອນ.
- ໃນສະໄໝທີ່ໂຢຊວຍເປັນຜູ້ນຳອິດສະຣາເອນຢູ່ນັ້ນ, ເມືອງຊີໂລເປັນສະຖານທີ່ນັດປະຊຸມຂອງຄົນອິດສະຣາເອນ.


generated on Thu Jul 10 08:45:04 2025

- ອິດສະຣາເອນສິບສອງເຜົ່າໄດ້ນັດພົບກັນຢູ່ທີ່ເມືອງຊີໂລເພື່ອຟັງໂຢຊວຍກ່າວແກ່ພວກເຂົາວ່າ ສ່ວນໃດຂອງແຜ່ນດິນການາອານທີ່ຈະຖືກມອບໃຫ້ແກ່ພວກເຂົາແຕ່ລະເຜົ່າ.
- ກ່ອນທີ່ຈະມີການສ້າງພຣະວິຫານຂຶ້ນມາໃນນະຄອນເຢຣູຊາເລັມ, ຊີໂລເປັນສະຖານທີ່ ທີ່ຊາວອິດສະຣາເອນມາຖວາຍເຄື່ອງບູຊາແດ່ພຣະເຈົ້າ.
- ເມື່ອຊາມູເອນຍັງເປັນເດັກນ້ອຍ ຮັນນາແມ່ຂອງເຂົາໄດ້ພາເຂົາໄປອາໄສຢູ່ທີ່ຊີໂລ ເພື່ອໃຫ້ປະໂຣຫິດເອລີສັ່ງສອນເຂົາໃຫ້ຮັບໃຊ້ພຣະເຈົ້າ.

## ຊີໂອນ, ພູເຂົາຊີໂອນ

### ນິຍາມ

ເດີມຄຳວ່າ "ຊີໂອນ" ຫລື "ພູເຂົາຊີໂອນ" ອ້າງເຖິງທີ່ໝັ້ນຫລືປ້ອມປາການທີ່ກະສັດດາວິດຍຶດຈາກຄົນເຢບຸດ ຄຳທັງສອງນີ້ໄດ້ກາຍມາເປັນການອ້າງອີງເຖິງກຸງເຢຣູຊາເລັມ.

- ພູເຂົາຊີໂອນແລະພູເຂົາໂມຣີອາເປັນເນີນເຂົາສອງແຫ່ງຊຶ່ງກຸງເຢຣູຊາເລັມຕັ້ງຢູ່ ຕໍ່ມາພາຍຫລັງ "ຊີໂອນ" ແລະ "ພູເຂົາຊີໂອນ" ໄດ້ກາຍເປັນຄຳສັບຫົວໄປທີ່ອ້າງເຖິງວິຫານທີ່ຕັ້ງຢູ່ໃນກຸງເຢຣູຊາເລັມ
- ດາວິດໄດ້ຕັ້ງຊື່ "ຊີໂອນ ຫລື ກຸງເຢຣູຊາເລັມ ວ່າ "ເມືອງຂອງດາວິດ" ນີ້ແຕກຕ່າງຈາກບ້ານເກີດຂອງດາວິດ ຄືເມືອງເບັດເລເຮັມ ຊຶ່ງໄດ້ຖືກເອີ້ນວ່າເມືອງດາວິດ.
- ຄຳວ່າ " ຊີໂອນ "ໄດ້ໃຊ້ໃນການປຽບທຽບອີນໆ ອີກ ເພື່ອອ້າງເຖິງອິດສະຣາເອັນຫລືອານາຈັກແຫ່ງຈິດວິນຍານຂອງພຣະເຈົ້າ ຫລືກຸງເຢຣູຊາເລັມໃໝ່ ກຸງເຢຣູຊາເລັມແຫ່ງສະຫວັນໃໝ່ຊຶ່ງພຣະເຈົ້າຊົງເນຣະມິດສ້າງ.

## ຊີແນະ,ຄຳຊີແນະ

### ນິຍາມ

ຄຳວ່າ "ຊີແນະ" ແລະ "ຄຳຊີແນະ"ອ້າງເຖິງການໃຫ້ຄຳແນະນຳຢ່າງສະເພາະເຈາະຈົງວ່າຈະເຮັດຫຍັງ

- "ການໃຫ້ຄຳຊີແນະ" ໝາຍເຖິງການບອກໃຫ້ບາງຄົນໂດຍສະເພາະວ່າລາວຄວນເຮັດຢ່າງໃດ
- ເມື່ອພຣະເຢຊູປະທານເຂົ້າຈີ່ແລະປາແກ່ພວກສາວົກເພື່ອໃຫ້ເຂົາແຈກຈ່າຍໃຫ້ກັບປະຊາຊົນ ພຣະອົງໃຫ້ຄຳແນະນຳຢ່າງ ສະເພາະເຈາະຈົງວ່າພວກຈະຕ້ອງເຮັດຢ່າງໃດ
- ຂຶ້ນກັບກໍຣະນີ ຄຳວ່າ "ຊີແນະ"ສາມາດແປວ່າ "ບອກ" ຫຼື "ນຳທາງ" ຫຼື "ສອນ" ຫຼື "ໃຫ້ຄຳຊີແນະນຳ"
- ຄຳວ່າ "ຄຳຊີແນນຳ:ະ" ສາມາດແປໄດ້ວ່າ "ທິດທ່າງ" ຫຼື "ຄຳອະທິບາຍ" ຫຼື "ແມ່ນຫຍັງທີ່ລາວໄດ້ບອກໃຫ້ທ່ານທຳ"
- ເມື່ອພຣະເຈົ້າຊົງໃຫ້ຄຳແນະຄຳຕ່າງໆ ຄຳນີ້ບາງຄັ້ງແປວ່າ "ອອກຄຳສັ່ງ"ຫຼື "ສັ່ງໃຫ້ເຮັດ"

## ຊື, ນາມ, ພຣະນາມ

### ນິຍາມ

ໃນພຣະຄຳພີນັ້ນ ຄຳວ່າ "ຊື" ສາມາດໃຊ້ໄດ້ໃນຄຳອຸປະມາໄດ້ຫລາຍທາງ.

- ໃນບາງກໍລະນີ "ຊື" ອ້າງເຖິງຊື່ສຽງຂອງບຸກຄົນ ເຊັ່ນ : "ໃຫ້ເຮົາສ້າງຊື່ສຽງໄວ້ສຳລັບພວກເຮົາ"
- ຄຳວ່າ "ຊື" ຫມາຍເຖິງຄວາມຈິດຈຳບາງສິ່ງບາງຢ່າງ ເຊັ່ນ : "ລຶບຊື່ຂອງຮູບເຄົາລົບເສຍ"ຫມາຍເຖິງການທຳລາຍຮູບເຄົາລົບຕ່າງໆ ເພື່ອພວກມັນຈະບໍ່ເປັນທີ່ຈົດຈຳຫລືເຄົາລົບບູຊາອີກຕໍ່ໄປ.
- ການເວົ້າ : "ໃນພຣະນາມຂອງພຣະເຈົ້າ" ໝາຍເຖິງການເວົ້າດ້ວຍສິດທິອຳນາດຫຼືເປັນຕົວແທນຂອງພຣະເຈົ້າ.
- ຄຳວ່າ "ຊື" ຂອງບາງຄົນຍັງສາມາດອ້າງຕົວບຸກຄົນ ເຊັ່ນ : "ດ້ວຍວ່າບໍ່ມີນາມຊື່ອື່ນໃດຫົວໃຕ້ຟ້າທີ່ຊົງປະທານແກ່ມະນຸດເພື່ອໃຫ້ເຮົາທັ້ງຫຼາຍຕ້ອງໄດ້ພົ້ນ".

### ຄຳແນະນຳໃນການແປ

- ຄຳເວົ້າວ່າ "ພຣະນາມອັນປະເສີດ" ສາມາດແປອີກຢ່າງໜຶ່ງໄດ້ວ່າ "ຊື່ສຽງອັນດີຂອງພຣະອົງ".
- ການເຮັດບາງຢ່າງ "ໃນພຣະນາມຂອງ" ສາມາດແປອີກຢ່າງໜຶ່ງໄດ້ວ່າ "ໂດຍລິດອຳນາດຂອງ" ຫຼື "ໂດຍການຊົງອະນຸນາດຂອງ" ຫຼື "ໂດຍການເປັນຕົວແທນຂອງ" ບຸກຄົນນັ້ນ.
- ຄຳເວົ້າທີ່ວ່າ "ໃຫ້ເຮົາສ້າງຊື່ສຽງໄວ້" ສາມາດແປໄດ້ວ່າ "ເຮັດໃຫ້ຜູ້ຄົນຮູ້ຈັກເຮົາ" ຫຼື "ເຮັດໃຫ້ຜູ້ຄົນຄິດວ່າເຮົາມີຄວາມສຳຄັນຫຼາຍສໍ່າໃດ".
- ປະໂຫຍກທີ່ວ່າ "ຈົ່ງເອີ້ນນາມເຂົາວ່າ" ສາມາດແປໄດ້ອີກ "ຈົ່ງຕັ້ງຊື່ເຂົາ" ຫຼື "ຈົ່ງໃຫ້ຊື່ເຂົາວ່າ".


generated on Thu Jul 10 08:45:04 2025

- ຄຳເວົ້າ "ຄົນເຫຼົ່ານັ້ນທີ່ຮັກຊື່ຂອງທ່ານ" ແປໄດ້ອີກວ່າ "ຄົນເຫຼົ່ານັ້ນທີ່ຮັກທ່ານ".
- ຄຳເວົ້າ "ໃຫ້ຕັດຊື່ຕ່າງໆຂອງຮູບເຄົ້າລົບອອກ" ແປໄດ້ອີກວ່າ "ທຳລາຍຮູບເຄົ້າລົບຂອງຄົນນອກສາດສະນາອອກ ເພື່ອທີ່ພວກເຂົາຈະບໍ່ເປັນທີ່ຈົດຈ່ຳ" ຫຼື "ເຮັດໃຫ້ປະຊາຊົນເຊົານະມັສການພະທຽມ" ຫຼື ໃຫ້ທຳລາຍພະທຽມຢ່າງໝົດສິ້ນ ເພື່ອທີ່ປະຊາຊົນຈະບໍ່ຄິດເຖິງພວກມັນອີກຕໍ່ໄປ".

## ຊື່ນຊອບ, ຊຶ່ງເປັນທີ່ຊື່ນຊອບ, ຄວາມລຳອຽງ

### ນິຍາມ

ຄຳວ່າ "ຊື່ນຊອບ" ກ່າວເຖິງການທຳບາງສິ່ງທີ່ເປັນປະໂຫຍດກັບບາງຄົນໃນທາງບວກ. ບາງຢ່າງ "ຊຶ່ງເປັນທີ່ຊື່ນຊອບ" ທີ່ເປັນການຍອມຮັບ, ໃນທາງບວກ, ຫລືໃຫ້ປະໂຫຍດ.

- ຄຳວ່າ "ຄວາມລຳອຽງ" ໝາຍເຖິງການກະທຳຢ່າງຊື່ນຊອບຕໍ່ບາງຄົນແຕ່ບໍ່ແມ່ນທຸກຄົນ. ຫລາຍຄັ້ງຄວາມລຳອຽງຄືຄຳວ່າ "ລຳອຽງ" ໝາຍຄວາມເຖິງການກະທຳຢ່າງຊື່ນຊອບຕໍ່ບາງຄົນ, ແຕ່ບໍ່ແມ່ນຄົນອື່ນໆ. ເຊັ່ນການສະແດງຕໍ່ຄົນລວຍຫລືຄົນທີ່ພິຈາລະນາກຳນົດໄວ້.
- ພຣະເຢຊູຊົງໄດ້ເຕີບໂຕ "ດ້ວຍຄວາມຊື່ນຊອບຂອງ" ພຣະເຈົ້າແລະມະນຸດ. ນີ້ໝາຍຄວາມວ່າພວກເຂົາໄດ້ຍອມຮັບພຣະລັກສະນະແລະຄວາມປະພຶດຂອງພຣະອົງ.
- ສຳນວນຄຳວ່າ "ຫາຄວາມຊື່ນຊອບ" ໝາຍເຖິງບຸກຄົນທີ່ໄດ້ເປັນທີ່ຍອມຮັບໂດຍບາງຄົນ.
- ເມື່ອກະສັດຊົງສະແດງຄວາມຊື່ນຊອບແກ່ບາງຄົນ, ຫລາຍຄັ້ງມີຄວາມໝາຍວ່າພຣະອົງຊົງຍອມຮັບຄຳຮ້ອງຂໍຂອງຄົນນັ້ນແລະມອບໃຫ້.

### ຄຳແນະນຳການແປ

- ອີກແນວທາງໜຶ່ງໃນຄຳແປຄຳວ່າ "ຊື່ນຊອບ" ສາມາດລວມທັ້ງ "ຄຳອວຍພອນ" ຫລື "ຜົນປະໂຫຍດໄດ້ດ້ວຍ."
- ຄຳວ່າ "ປີແຫ່ງຄວາມຊື່ນຊອບຂອງພຣະຢາເວ" ສາມາດແປໄດ້ອີກວ່າ, "ປີນັ້ນ."

## ຊຸບຊິບນິນທາ

### ນິຍາມ

ຄຳວ່າ "ຊຸບຊິບນິນທາ"
ໝາຍເຖິງການເວົ້າລົມກ່ຽວກັບບັນຫາສ່ວນຕົວຂອງຄົນອື່ນລັບຫລັງພວກເຂົາໃນແງ່ລົບແລະບໍ່ເກີດຜົນດີໃດເລີຍ.ຫລາຍຄັ້ງສິ່ງທີ່ເວົ້າເຖິງກໍ່ບໍ່ໄດ້ຢືນຢັນວ່າເປັນຄວາ

- ພຣະຄັມພີໃໝ່ບອກວ່າການກະຈາຍຂ້ໍມູນໃນທາງລົບກ່ຽວກັບຄົນອື່ນນັ້ນບໍ່ຖືກຕ້ອງ. ການນິນທາໃສ່ຮ້າຍເປັນຕົວຢ່າງຂອງຄຳເວົ້າໃນແງ່ລົບ.
- ການນິນທາເປັນອັນຕະລາຍຕໍ່ບຸກຄົນທີ່ຖືກເວົ້າເຖິງເພາະວ່າຫລາຍຄັ້ງມັນທຳລາຍຄວາມສຳພັນຂອງບາງຄົນກັບປະຊາຊົນຄົນອື່ນໆ.

## ຊົນຊາດ, ປະຊາຊາດ

### ນິຍາມ

ຊົນຊາດຫຼືປະຊາຊາດເປັນກຸ່ມປະຊາຊົນໃຫຍ່ທີ່ປົກຄອງໂດຍລັດຖະບານ ປະຊາຊົນຂອງຊາດ
ສ່ວນໃຫຍ່ແລ້ວຈະມາຈາກບັນພະບຸລຸດດຽວກັນຫລືມີເຊື້ອຊາດຮ່ວມກັນ.

- ຄຳວ່າ "ຊົນຊາດ" ຫລື "ປະຊາຊາດ" ນັ້ນໂດຍປົກກະຕິແລ້ວຮວມໄປເຖິງວັດທະນະທຳແລະ

ເຂດແດນ.

- ໃນພຣະຄຳພີ ຄຳວ່າ"ຊົນຊາດ" ຫຼື "ປະຊາຊາດ" ໝາຍເຖິງປະເທດ (ເຊັ່ນ : ປະເທດອີຍິບ ຫຼື ປະເທດເອທິໂອເປຍ) ແຕ່ບາງຄັ້ງ ໂດຍທົ່ວໄປຈະໝາຍເຖິງກຸ່ມຄົນຫຼາຍກວ່າ ໂດຍສະເພາະຫາກຢູ່ໃນ ພະຫນັງສືພະ ເປັນສິ່ງທີ່ຜູ້ແປຈະຕ້ອງກວດກາເບິ່ງຕາມກໍລະນີນັ້ນ.
- ປະຊາຊາດໃນພຣະຄຳພີ ຮວມທັ້ງ ອິສຣາເອນ, ຟີລິດສະຕິນ, ອັດຊີເຣຍ,ບາບີໂລນ,

ການາອານ, ໂຣມແລະກຣີກ ທ່ານກາງຊົນຊາດອື່ນໆ.

- ບາງເທື່ອຄຳວ່າ "ຊົນຊາດ" ຖືກໃຊ້ໃນອຸປະມາອ້າງເຖິງບັນພະບຸລຸດຂອງກຸ່ມຄົນບາງກຸ່ມ


generated on Thu Jul 10 08:45:04 2025

ເຊັ່ນ : ເມື່ອພຣະເຈົ້າບອກກັບເຣເບກາ ວ່າລູກຊາຍເຊິ່ງຍັງບໍ່ໄດ້ເກີດມານັ້ນຄື "ຊົນຊາດ" ເຊິ່ງຈະຕໍ່ສູ້ກັນ ສາມາດແປໄດ້ອີກວ່າ "ເປັນຜູ້ກໍ່ຕັ້ງສອງຊົນຊາດ" ຫຼື "ບັນພະບຸລຸດຂອງປະຊາຊົນສອງກຸ່ມ" .

- ຄຳວ່າ "ຊົນຊາດ" ນັ້ນບາງເທື່ອອ້າງເຖິງ "ຊົນຕ່າງຊາດ" ຫຼື ປະຊາຊົນຜູ້ເຊິ່ງບໍ່ໄດ້ນະມັດສະການພຣະຢາເວ ພາຍລວມໂດຍປົກກະຕິຈະເຮັດໃຫ້ຄວາມຫມາຍຊັດເຈນ

### ຄຳແນະນຳໃນການແປ

- ຂຶ້ນຢູ່ກັບພາບລວມ ຄຳວ່າ "ຊົດຊາດ" ສາມາດແປວ່າ "ກຸ່ມປະຊາຊົນ" ຫລື "ປະຊາຊົນ"ຫລື"ປະເທດ" .
- ຖ້າພາສາທີ່ແປຢູ່ ມີຄຳສຳລັບ "ຊົນຊາດ" ທີ່ແຕກຕ່າງຈາກຄຳເຫລົ່ານີ້ ສາມາດໃຊ້ຄຳເຫລົ່ານັ້ນໄດ້ເມື່ອຄຳເຫຼົ່ານີ້ປາກົດ ໃນເນື້ອຄວາມພຣະຄຳພີ ທີ່ສາມາດຄົງຄວາມເປັນຫຳມະຊາດແລະຄວາມຖືກຕ້ອງຂອງການແປ.
- ຄຳພະຫູພົດຂອງຄຳວ່າ "ຊົນຊາດ" ສາມາດແປວ່າ "ກຸ່ມຊົນຊາດ" .
- ໃນບາງພາບລວມນັ້ນ ຄຳນີ້ສາມາດແປວ່າ "ຄົນຕ່າງຊາດ" ຫຼື "ບໍ່ແມ່ນຊາວຍິວ".

## ຊົມຊື່ນຍິນດີ, ຄວາມຊົມຊື່ນຍິນດີ

### ນິຍາມ

ຄຳວ່າ "ຊົມຊື່ນຍິນດີ" ແລະ "ຄວາມຊົມຊື່ນຍິນດີ" ກ່າວເຖິງການມີຄວາມສຸກຫລາຍເພາະປະສົບຄວາມສຳເລັດ ຫລືໄດ້ຮັບການອວຍພອນພິເສດ.

- ທີ່ຈະມີ "ຄວາມຊົມຊື່ນຍິນດີ" ລວມທັ້ງຄວາມຮູ້ສຶກຂອງການສະເຫລີມສະຫລອງບາງສິ່ງທີ່ດີເດັ່ນ.
- ຄົນເຮົາສາມາດຊົມຊື່ນຍິນດີໃນຄວາມດີຂອງພຣະເຈົ້າ.
- ຄຳວ່າ "ຄວາມຊົມຊື່ນຍິນດີ" ສາມາດລວມເຖິງການໂອ້ອວດໃນຄວາມຮູ້ສຶກຂອງຄວາມສຸກກ່ຽວກັບຄວາມສຳເລັດ ຫລືຄວາມຈະເລີນຮຸ່ງເຮືອງ.
- ຄຳວ່າ "ຊົມຊື່ນຍິນດີ" ສາມາດແປໄດ້ອີກວ່າ "ສະເຫລີມສະຫລອງດ້ວຍຄວາມຊົມຊື່ນຍິນດີ" ຫລື "ສັນລະເສີນດ້ວຍຄວາມຍິນດີຢ່າງໃຫຍ່ຫລວງ."
- "ຄວາມຊົມຊື່ນຍິນດີ" ສາມາດແປໄດ້ອີກວ່າ, "ສັນລະເສີນດ້ວຍຄວາມປະສົບຜົນສຳເລັດ" ຫລື "ສະຫລອງດ້ວຍການຍົກຍ້ອງຕົນເອງ" ຫລື "ອວດໂຕ."

## ຊົ່ວ, ຊົ່ວຮ້າຍ, ຄວາມຊົ່ວຮ້າຍ

### ນິຍາມ

ຄຳວ່າ "ຊົ່ວ" ແລະ "ຊົ່ວຮ້າຍ" ທັ້ງສອງຄຳນີ້ ໄດ້ອ້າງເຖິງສິ່ງໃດສິ່ງໜຶ່ງທີ່ກົງກັນຂ້າມກັບພຣະລັກສະນະທີ່ບໍຣິສຸດແລະນ້ຳພຣະໄທຂອງພຣະເຈົ້າ.

- ໃນເມື່ອຄຳທີ່ວ່າ "ຊົ່ວ" ອາດຈະເວົ້າເຖິງລັກສະນະຂອງຄົນໃດຄົນໜຶ່ງ, ຄຳວ່າ "ຊົ່ວຮ້າຍ" ອາດຈະເວົ້າເຖິງໃນເລື່ອງພຶດຕິກຳຂອງຄົນຫລາຍກວ່າ. ແຕ່ຢ່າງໃດກໍຕາມ, ທັ້ງສອງຄຳນີ້ກໍມີຄວາມໝາຍທີ່ຄ້າຍຄືກັນ.
- ຄຳວ່າ "ຄວາມຊົ່ວຮ້າຍ" ເວົ້າເຖິງຊີວິດການເປັນຢູ່ ເມື່ອມະນຸດເຮັດສິ່ງຊົ່ວຮ້າຍ.
- ຜົນຂອງຄວາມຊົ່ວນັ້ນສະແດງໃຫ້ເຫັນຢ່າງແຈ່ມແຈ້ງ ເມື່ອມະນຸດເຮັດກັບຄົນອື່ນແບບຜິດໆ ດ້ວຍການເຂັ້ນຂ້າ, ລັກຂະໂມຍ, ເວົ້າໃສ່ຮ້າຍ ຫລືເປັນຄົນທີ່ໂຫດຮ້າຍແລະໃຈຮ້າຍ.

### ຄຳແນະນຳໃນການແປ

- ຄຳວ່າ "ຊົ່ວ" ແລະ "ຊົ່ວຮ້າຍ" ສາມາດແປໄດ້ວ່າ "ຊົ່ວຊ້າ" ຫລື "ມີບາບ" ຫລື "ຜິດສິນທຳ" ທັ້ງນີ້ແມ່ນຂຶ້ນຢູ່ກັບກໍລະນີນັ້ນໆ.
- ຄວາມໝາຍອື່ນໃນການແປຄຳເຫລົ່ານີ້ອາດຈະລວມເຖິງຄຳວ່າ, "ບໍ່ດີ" ຫລື "ບໍ ຊອບທຳ" ຫລື "ບໍ່ມີສິນທຳ."
- ຕ້ອງໃຫ້ແນ່ໃຈວ່າຄຳເຫລົ່ານີ້ຫລືຖ້ອຍຄຳທີ່ເຄີຍແປຄຳເຫລົ່ານີ້ ເໝາະສົມກັບກໍລະນີນັ້ນໆແລະມີຄວາມເປັນທຳມະຊາດໃນພາສາທີ່ແປ.


generated on Thu Jul 10 08:45:04 2025

## ຊົ່ວໂມງ, ເວລາ

### ນິຍາມ

ນອກເໜືອຈາກການໃຊ້ເພື່ອໝາຍເຖິງເວລາຫລືໄລຍະເວລາທີ່ບາງຢ່າງເກີດຂຶ້ນ, ຄຳວ່າ "ຊົ່ວໂມງ" ຍັງຖືກໃຊ້ໃນບາງສ່ວນຢ່າງຫລາຍຢ່າງ:

- ບາງເທື່ອ "ຊົ່ວໂມງ" ໝາຍເຖິງເວລາທີ່ກຳນົດໄວ້ເປັນປະຈຳໃນການເຮັດບາງຢ່າງເຊັ່ນ "ຊົ່ວໂມງແຫ່ງການອະທິຖານ."
- ເມື່ອຂໍ້ຄວາມນັ້ນບອກວ່າ "ຊົ່ວໂມງນັ້ນມາເຖິງແລ້ວ" ສຳລັບພຣະເຢຊູໃນການຫົນທຸກແລະຖືກປະຫານ
  ນີ້ໝາຍຄວາມວ່າເປັນເວລາທີ່ຖືກກຳນົດໄວ້ຊຶ່ງພຣະເຈົ້າໄດ້ຊົງຕັດສິນພຣະໄທມາຕົ້ນແລ້ວວ່າສິ່ງນີ້ຈະເກີດຂຶ້ນ.
- ຄຳວ່າ "ຊົ່ວໂມງ" ຍັງຖືກໃຊ້ໝາຍເຖິງ "ໃນຊ່ວງເວລານັ້ນ" ຫລື "ຕອນນັ້ນ."
- ເມື່ອຂໍ້ຄວາມນັ້ນເວົ້າເຖິງ "ຊົ່ວໂມງ" ທີ່ລ່ວງເລີຍມາຫລາຍ ນີ້ໝາຍຄວາມວ່າເປັນເວລາຄ່ຳຂອງວັນທີ່ດວງອາທິດກຳລັງຈະຕົກດິນ.

### ຄຳແນະນຳໃນການແປ

- ເມື່ອໃຊ້ໃນບາງສ່ວນບາງຢ່າງ, ຄຳວ່າ "ຊົ່ວໂມງ" ສາມາດແປວ່າ "ເວລາ" ຫລື "ຂະນະນັ້ນ" ຫລື "ເວລາທີ່ນັດໝາຍ."
- ວະລີ "ໃນເວລານັ້ນ" ຫລື "ໃນເວລາດຽວກັນ" ສາມາດແປວ່າ, "ໃນຂະນະນັ້ນ" ຫລື "ໃນເວລານັ້ນ" ທັນທີທັນໃດ" ຫລື "ຂະນະນີ້."
- ຄຳກ່າວ "ເວລາລ່ວງໄປ" ສາມາດແປວ່າ, "ມັນເປັນເວລາຕອນຄ່ຳຂອງມື້ແລ້ວ" ຫລື "ມັນຈະມືດແລ້ວໃນບໍ່ຊ້ຳ" ຫລື
  "ມັນເປັນເວລາບ່າຍຫລາຍແລ້ວ."

## ຊ່ວຍຊີວິດ , ປອດໄພ

### ນິຍາມ

ຄຳວ່າ ”ຊ່ວຍຊີວິດ”ເວົ້າເຖິງການຊ່ວຍໃຫ້ບາງຄົນພົ້ນຈາກສິ່ງຊົ່ວຮ້າຍຫລືສິ່ງທີ່ຊົ່ວອັນຕະລາຍ ການ“ໄດ້ຮັບຄວາມປອດໄພ”
ຫມາຍເຖິງການປົກປ້ອງຈາກການຖືກທຳລາຍຫລືຈາກອັນຕະລາຍ

- ໃນທາງເນື້ອຫນັງມະນຸດສາມາດຖືກຊ່ວຍຫລືຊ່ວຍກູ້ໃຫ້ພົ້ນຈາກການຖືກທຳລາຍ ອັນຕະລາຍຫລືຄວາມຕາຍໄດ້
- ໃນທາງຝ່າຍວິນຍານຫາກຄົນນຶ່ງທີ່ໄດ້ຮັບການ
  ”ຊ່ວຍໃຫ້ລອດ”ນັ້ນຫມາຍເຖິງໂດຍຜ່ານທາງສະຫວັນຂອງພຣະເຢຊູຄຣິດເທິງໄມ້ກາງເຂນ
  ພຣະເຈົ້າໄດ້ໃຫ້ອະໄພເຂົາແລະໄດ້ຊ່ວຍກູ້ເຂົາຕໍ່ການຖືກທຳໂທດໃນນາລົກເພາະບາບຂອງພວກເຂົາ
- ມະນຸດສາມາດຊ່ວຍເຫລືອແລະຊ່ວຍກູ້ຈາກອັນຕະລາຍໄດ້ມີພຽງພຣະເຈົ້າອົງດຽວທີ່ສາມາດຊ່ວຍມະນຸດຈາກການຖືກລົງໂທດນິລັນໄດ້ເພາະຄວາມບາບ

### ຄຳແນະນຳການແປ

- ວິທີທີ່ແປຄຳ "ຊ່ວຍຊີວິດ" ສາມາດລວມຄຳວ່າ ""ສິ່ງມອບ" ຫຼື"ຊ່ວຍຈາກອັນຕະລາຍ" ຫຼື"ຕັດຫ່າງແຫ່ງອັນຕະລາຍອອກໄປ"
  ຫຼື"ຊ່ວຍໃຫ້ພົ້ນຈາກຄວາມຕາຍ"
- ຄຳເວົ້າ "ຜູ້ໃດກໍຕາມທີ່ຮັກສາຊີວິດ" ຄຳວ່າ"ຮັກສາ" ສາມາດແປວ່າ "ສະງວນ" ຫຼື "ປ້ອງກັນ"
- ຄຳວ່າ "ບໍ່ຊ່ວຍເຫລືອ" ສາມາດແປວ່າ "ປ້ອງກັນຈາກອັນຕະລາຍ" ຫຼື "ໃນສະຖານທີ່ທີ່ບໍ່ມີສິ່ງໃດຈະທຳອັນຕະລາຍຜູ້ນັ້ນໄດ້"

## ຍອມຈຳນົນ,ການຍອມຈຳນົນ

### ນິຍາມ

ຄຳວ່າ "ຍອມຈຳນົນ" ໂດຍປົກກະຕິໝາຍເຖິງການກະທຳດ້ວຍຄວາມສະມັກໃຈຂອງຕົນຍອມຢູ່ພາຍໃຕ້ສິດອຳນາດຂອງບຸກຄົນຫຼືລັດຖະບານ.

- ພຣະຄຳພີໄດ້ບອກຜູ້ທີ່ເຊື່ອໃນພຣະເຢຊູຄຣິດໃຫ້ຍອມຢູ່ໃຕ້ພຣະເຈົ້າແລະສິດອຳນາດອື່ນໆໃນຊີວິດຂອງເຂົາເຈົ້າ.
- ຄຳແນະນຳທີ່ວ່າໃຫ້ “ ຍອມຈຳນົນຕໍ່ກັນແລະກັນ”
  ໝາຍເຖິງການຍອມຮັບການແກ້ໄຂຢ່າງຖ່ອມຕົວແລະເອົາໃຈໃສ່ຄວາມຕ້ອງການຂອງຄົນອື່ນຫລາຍກວ່າຄວາມຕ້ອງການຂອງເຮົາເອງ.
- ການ “ ດຳລົງຊີວິດຢູ່ພາຍໃຕ້ການຍອມຈຳນົນ”
  ໝາຍເຖິງການເຮັດໃຫ້ຕົວເຮົາເອງຢູ່ພາຍໃຕ້ສິດອຳນາດຂອງບາງສິ່ງບາງຢ່າງຫຼືບາງຄົນ.

### ຄຳແນະນຳໃນການແປ

- ຄຳວ່າ "ຍອມຈຳນົນ" ຍັງສາມາດຖືກແປໄດ້ວ່າ, "ວາງຢູ່ພາຍໃຕ້ສິດອຳນາດ" ຫລື "ປະຕິບັດຕາມການນຳພາຂອງ" ຫລື
  "ໃຫ້ກຽດແລະເຄົາລົບດ້ວຍຄວາມຖ່ອມຕົນແລະນັບຖື".


generated on Thu Jul 10 08:45:04 2025

- ຄຳວ່າ "ການຍອມຢູ່ໃຕ້" ສາມາດຖືກແປໄດ້ວ່າ, "ການເຊື່ອຟັງ" ຫຼື "ປະຕິບັດຕາມສິດອຳນາດຂອງ".
- ປະໂຫຍກທີ່ວ່າ "ມີຊີວິດຢູ່ພາຍໃຕ້ການຍອມຈຳນົນ" ສາມາດຖືກແປໄດ້ວ່າ "ຢູ່ໃນຄວາມເຊື່ອຟັງ" ຫຼື "ເອົາຕົວເອງຢູ່ພາຍໃຕ້ສິດອຳນາດຂອງ".
- ປະໂຫຍກທີ່ວ່າ "ຍອມຈຳນົນ" ສາມາດແປໄດ້ວ່າ "ຍອມຮັບສິດ ອຳນາດຢ່າງຖ່ອມຕົວ".

## ຍອມຮັບ

### ນິຍາມ

ຄຳວ່າ"ຍອມຮັບ" ໝາຍຄວາມເຖິງການຍອມຮັບບາງສິ່ງຫຼືບາງຄົນຢ່າງເໝາະສົມ.

- ການຍອມຮັບພຣະເຈົ້າກ່ຽວຂ້ອງກັບການກະທຳທີ່ສະແດງວ່າສິ່ງທີ່ພຣະອົງກ່າວນັ້ນເປັນຄວາມຈິງ.
- ຄົນທີ່ຍອມຮັບພຣະເຈົ້າຈະສະແດງອອກໂດຍການເຊື່ອຟັງພຣະອົງ ຊຶ່ງເປັນການຖວາຍກຽດແດ່ພຣະນາມຂອງພຣະອົງ.
- ການຍອມຮັບບາງສິ່ງໝາຍເຖິງຄວາມສັດທາວ່າສິ່ງນັ້ນຈິງໂດຍການຢືນຢັນດ້ວຍການກະທຳແລະຄຳເວົ້າ.

### ຂໍ້ແນະນຳໃນການແປ

- ໃນບໍຣິບົດຂອງການຍອມຮັບວ່າບາງສິ່ງນັ້ນຈິງ "ການຍອມຮັບ" ສາມາດແປໄດ້ອີກຢ່າງວ່າ "ຮັບຮອງ" ຫຼື "ປະກາດໃຫ້ຊາບ"ຫຼື "ສາລະພາບວ່າເປັນຈິງ" ຫຼື "ສັດທາ."
- ເມື່ອເວົ້າເຖິງການຍອມຮັບບຸກຄົນໃດບຸກຄົນໜຶ່ງ ຄຳນີ້ອາດແປໄດ້ອີກວ່າ "ຮັບ" ຫຼື "ເຫັນຄຸນຄ່າຂອງ" ຫຼື "ບອກເລື່ອງນັ້ນໃຫ້ຄົນອື່ນໆ.

## ຍັກ

### ນິຍາມ

ຍັກ ໂດຍປົກກະຕິອ້າງເຖິງບຸກຄົນທີ່ຕົວໃຫຍ່ຜິດປົກກະຕິທັ້ງຄວາມສູງແລະກຳລັງ.

- ໂກລີອາດ ທະຫານຊາວຟີລິດສະຕິນທີ່ຕໍ່ສູ້ກັບ ດາວິດ ຖືກເອີ້ນວ່າຍັກເພາະວ່າເຂົາສູງຫລາຍ ຕົວໃຫຍ່ແລະເປັນຊາຍທີ່ສູງ, ໃຫຍ່,ແລະແຂງແຮງ.
- ຊົນຊາດອີສະຣາເອນທີ່ໄປສອດແນມແຜ່ນດິນຄານາອານບອກວ່າຄົນທີ່ອາໃສຢູ່ທີ່ນັ້ນເຫມືອນຍັກ.

## ຍາກລຳບາກ, ຍາກລຳບາກທີ່ສຸດ, ເຮັດໃຫ້ເຂັ້ມແຂງ

### ນິຍາມ

ຄຳວ່າ "ຍາກລຳບາກ" ມີຄວາມໝາຍຫລາຍຢ່າງຂຶ້ນຢູ່ກັບສະພາບການ. ຄຳນີ້ມັກຈະອະທິບາຍບາງສິ່ງທີ່ຍາກ, ຄົງທົນ, ຫລືບ່ຍອມຢຶດຫຍຸ່ນ.

- ຄຳກ່າວ "ໃຈແຂງ" ຫລື "ຫົວແຂງ" ໝາຍເຖິງຄົນທີ່ບ່ຍອມສຳນຶກຜິດແບບຫົວຊົນຝາ
  ຄຳກ່າວເຫລົ່ານີ້ອະທິບາຍຄົນທີ່ຢືນການວ່າຈະບ່ຍອມເຊື່ອຟັງພຣະເຈົ້າ .
- ຄຳກ່າວເຊີ່ງປຽບທຽບ, "ຄວາມແຂງກະດ້າງຂອງຫົວໃຈ" ແລະ "ຄວາມແຂງກະດ້າງຂອງຫົວໃຈຂອງພວກເຂົາ"
  ອ້າງຄວາມເຖິງການບ່ເຊື່ອຟັງດ້ວຍຄວາມດື້ດ້ານດ້ວຍ.
- ຖ້າບາງຄົນໃຈ "ແຂງ" ນີ້ໝາຍຄວາມວ່າບຸກຄົນນັ້ນປະຕິເສດທີ່ຈະເຊື່ອຟັງແລະຍັງຄົງບ່ກັບໃຈ.
- ເມື່ອໃຊ້ເປັນຄຳວິເສດ "ເຮັດວຽກໜັກ" ຫລື "ພະຍາຍາມຢ່າງໜັກ,"
  ຄຳນີ້ໝາຍຄວາມວ່າການເຮັດບາງຢ່າງດ້ວຍຄວາມແຂງຂັນແລະດຸໝັ່ນ, ການພະຍາຍາມທີ່ຈະເຮັດບາງຢ່າງໃຫ້ດີທີ່ສຸດ.

### ຄຳແນະນຳໃນການແປ

- ຄຳວ່າ "ແຂງ" ສາມາດແປໄດ້ວ່າ "ຍາກ" ຫລື "ດື້ດ້ານ" ຫລື "ທ້າທາຍ," ຂຶ້ນຢູ່ກັບສະພາບການ.
- ຄຳວ່າ "ຄວາມແຂງ" ຫລື "ຄວາມແຂງຂອງໃຈ" ຫລື "ໃຈແຂງ" ສາມາດແປວ່າ "ຄວາມດື້ດ້ານ" ຫລື "ການກະບົດຕໍ່ຕ້ານ" ຫລື "ທັດສະນະຄະຕິທີ່ຕໍ່ຕ້ານ" ຫລື "ການດື້ດ້ານທີ່ບ່ເຊື່ອຟັງ" ຫລື "ດື້ບ່ເສຍໃຈໃນຄວາມຜິດບາບ."
- ຄຳວ່າ "ເຮັດໃຫ້ແຂງ" ສາມາດແປວ່າ "ດື້ບ່ເສຍໃຈໃນຄວາມຜິດບາບ" ຫລື "ປະຕິເສດທີ່ຈະເຊື່ອຟັງ."
- "ຢ່າເຮັດໃຫ້ໃຈທ່ານແຂງ" ສາມາດແປວ່າ "ຢ່າປະຕິເສດທີ່ຈະເສຍໃຈໃນຄວາມຜິດບາບ" ຫລື "ຢ່າດື້ດ້ານບ່ຍອມເຊື່ອຟັງ."
- ວິທີອື່ນທີ່ຈະແປ "ຫົວແຂງ" ຫລື "ໃຈແຂງ" ສາມາດລວມ "ບ່ເຊື່ອຟັງດ້ວຍຄວາມດື້ດ້ານ" ຫລື "ບ່ເຊື່ອຟັງຢ່າງຕໍ່ເນື່ອງ" ຫລື "ປະຕິເສດທີ່ຈະກັບໃຈ" ຫລື "ຕໍ່ຕ້ານຢູ່ສະເໝີ."


generated on Thu Jul 10 08:45:04 2025

- ໃນຄຳກ່າວເຊັ້ນ "ເຮັດວຽກໜັກ" ຫລື "ພະຍາຍາມຢ່າງຫລາຍ" ຄຳວ່າ "ແຂງ" ອາດຈະແປໄດ້ວ່າ "ດ້ວຍຄວາມພາກພຽນ" ຫລື "ຢ່າງມຸ່ງມາໝະ."
- ຄຳກ່າວເຊັ້ນ "ກົດດັນຢ່າງໜັກ" ສາມາດແປວ່າ "ຜັກດັນດ້ວຍກຳລັງ" ຫລື "ຜັກຢ່າງແຮງ."
- "ກົດຂີ່ຂົ່ມເຫັງປະຊາຊົນດ້ວຍງານໜັກ" ສາມາດແປວ່າ, "ບັງຄັບປະຊາຊົນໃຫ້ເຮັດວຽກຢ່າງໜັກໃຫ້ພວກເຂົາທຶນທຸກ" ຫລື "ເປັນເຫດໃຫ້ປະຊາຊົນທຶນທຸກໂດຍການບັງຄັບພວກເຂົາໃຫ້ເຮັດວຽກທີ່ຍາກ."
- ຊະນິດຕ່າງໆ ຂອງ "ງານທີ່ຍາກ" ໄດ້ເຮັດໃຫ້ມີປະສົບການໂດຍຜູ້ຍິງທີ່ກຳລັງຈະເກີດລູກ. ໃຫ້ເບິ່ງເລື່ອງ "ເຈັບທ້ອງອອກລູກ."

## ຍາດພີນ້ອງຄົ້ງໆ (ວົງຕະກຸນ)

### ນິຍາມ

ຄຳວ່າ "ທາຍາດ" ຄືບຸກຄົນທີ່ໄດ້ຮັບຊັບສິນຫລືເງິນຢ່າງຖືກກົດໝາຍທີ່ເປັນຂອງບຸກຄົນທີ່ໄດ້ຕາຍໄປແລ້ວ.

- ໃນສະໄໝພຣະຄຳພີ, ທາຍາດຫລັກຄືລູກຊາຍຄົນທຳອິດ, ຜູ້ທີ່ໄດ້ຮັບຊັບສິນແລະເງິນສ່ວນໃຫຍ່ຂອງພໍ່ຂອງເຂົາ.
- ພຣະຄຳພີໃຊ້ຄຳວ່າ "ທາຍາດ"
  ໃນເຊີງປຽບທຽບອ້າງເຖິງຄຣິດສະຕຽນໄດ້ຮັບຜືນຝ່າຍວິນຍານຈາກພຣະເຈົ້າໃນຖານະທີ່ເປັນພໍ່ຝ່າຍວິນຍານຂອງພວກເຂົາ.
- ໃນຖານະທີ່ເປັນລູກຂອງພຣະເຈົ້າ, ຄຣິດສະຕຽນຈຶ່ງໄດ້ຊື່ວ່າເປັນ "ທາຍາດຮ່ວມກັນ" ກັບພຣະເຢຊູຄຣິດ. ນີ້ສາມາດແປວ່າ, "ທາຍາດຮ່ວມ" ຫລື "ເພື່ອນທາຍາດ" ຫລື "ທາຍາດນຳກັນກັບ."
- ຄຳວ່າ "ທາຍາດ" ສາມາດແປວ່າ "ບຸກຄົນທີ່ກຳລັງໄດ້ຮັບຜືນປະໂຫຍດ"
  ຫລືຄຳກ່າວຫຍັງກໍຕາມທີ່ໃຊ້ໃນພາສາທີ່ສື່ຄວາມໝາຍເຖິງບາງຄົນຜູ້ທີ່ກຳລັງໄດ້ຮັບຊັບສິນແລະສິ່ງອື່ນໆ ເມື່ອພໍ່ແມ່ຫລືຍາດຄົນອື່ນໆ ເສຍຊີວິດ.

## ຍຶດ

### ນິຍາມ

ຄຳວ່າ“ ຍຶດ” ໝາຍເຖິງການຈັບຫລືຈັບເອົາບາງຄົນຫຼືບາງສິ່ງບາງຢ່າງໂດຍບັງຄັບ.
ມັນຍັງສາມາດໝາຍຄວາມວ່າຈະເອົາຊະນະແລະຄວບຄຸມຜູ້ໃດຜູ້ຫນຶ່ງ.

- ເມື່ອເມືອງໃດເຂົ້າມາໂດຍ ກຳ ລັງທະຫານ, ທະຫານຈະຍຶດເອົາຊັບສົມບັດອັນລ້ ຳຄ່າຂອງປະຊາຊົນທີ່ພວກເຂົາໄດ້ຍຶດເອົາ.
- ໃນເວລາທີ່ການນຳໃຊ້ຕົວເລກ, ບຸກຄົນສາມາດຖືກອະທິບາຍວ່າ "ຖືກຈັບດ້ວຍຄວາມຢ້ານກົວ." ນີ້ໝາຍຄວາມວ່າບຸກຄົນດັ່ງກ່າວໄດ້ "ເອົາຊະນະໂດຍຄວາມຢ້ານ" ຢ່າງກະທັນຫັນ. ມັນຍັງສາມາດແປເປັ້ນ "ທັນທີທັນໃດທີ່ມີຄວາມຢ້ານກົວຫຼາຍ."
- ໃນແງ່ຂອງຄວາມເຈັບປວດແຮງງານທີ"ຍຶດ"ແມ່ຍິງ,ຄວາມຫມາຍແມ່ນວ່າຄວາມເຈັບປວດແມ່ນກະທັນຫັນແລະແຮງເກີນໄປ.ສິ່ງນີ້ສາມາດຖືກແປວ່າ "ເອົາຊະນະ" ຫຼື "ເກີດຂຶ້ນຢ່າງກະທັນຫັນ."
- ຄຳສັບນີ້ຍັງອາດຈະຖືກແປເປັ້ນ,"ຄວບຄຸມ" ຫຼື "ກະທັນຫັນ" ຫຼື "ຄວ້ຳ".
- ສຳນວນທີ່ວ່າ "ຖືກຍຶດແລະນອນຢູ່ກັບບາງ" ສາມາດແປເປັ້ນ "ບັງຄັບຕົນເອງ" ຫລື "ລະເມີດສິດບາງ" ຫຼື "ຂົ່ມຂືນບາງ".
  ໃຫ້ແນ່ໃຈວ່າການແປພາສາແນວຄວາມຄິດນີ້ເປັ້ນທີ່ຍອມຮັບໄດ້.

## ຍູ້

### ນິຍາມ

ຄຳວ່າ "ຍູ້" ຕາມຕົວອັກສອນແລ້ວໝາຍເຖິງການຍ້າຍບາງສິ່ງບາງຢ່າງອອກໄປໂດຍການໃຊ້ກຳລັງ
ຍັງມີຄຳປຽບທຽບຄວາມຫມາຍຂອງຄຳນີ້ອີກຫຼາຍຄຳ

- ຄຳກ່າວ "ຜັກໂສໄລ່ສົ້ງ" ມີຄວາມຫມາຍວ່າ "ຕໍ່ຕ້ານ" ຫລື "ປະຕິເສດທີ່ຈະຊ່ວຍເຫລືອ"
- ການ"ດັນລົງ"ມີຄວາມຫມາຍວ່າ "ກົດຂີ່" ຫລື "ຂົ່ມເຫງ" ຫລື "ປາບ"
  ແລະຍັງສາມາດມີຄວາມຫມາຍເຖິງການທີ່ບາງຄົນຖືກຜັກລົງໄປສູ່ພື້ນດິນຕາມຕົວອັກສອນກໍໄດ້
- ການ"ໄລ່ໃຜບາງຄົນອອກ" ໝາຍເຖິງ "ການກຳຈັດອອກ" ຫລື "ໄລ່ອອກ" ຄົນນັ້ນ
- ຄຳກ່າວທີ່ວ່າ "ຢ່າງໜ້າຕໍ່ໄປ" ໝາຍເຖິງການພະຍາຍາມຫລືດຳເນີນການເຮັດບາງສິ່ງບາງຢ່າງໂດຍທີ່ບໍ່ແນ່ໃຈວ່າຖືກຫ້ອງຫລືປອດໄພ


generated on Thu Jul 10 08:45:04 2025

## ຍົກຂຶ້ນ, ຂຶ້ນ, ໄດ້ຂຶ້ນແລ້ວ, ເກີດຂຶ້ນ,ກໍ່ໃຫ້ເກີດຂຶ້ນ

### ນິຍາມ

ຍົກຂຶ້ນ, ແລະຍົກຂຶ້ນ ໂດຍຫົວໄປແລ້ວ,ຄໍາວ່າ"ຍົກຂຶ້ນ"ໝາຍເຖິງ"ຊູຂຶ້ນຫຼື"ເຮັດໃຫ້ສູງຂຶ້ນ"

- ຄໍາເວົ້າໃນທາງປຽບທຽບຂອງ,"ຍົກຂຶ້ນສູງ"ໝາຍເຖິງ ເຮັດໃຫ້ມີອັນໃດອັນນຶ່ງ ມີຂຶ້ນ ເກີດຂຶ້ນ. ແລະສາມາດໝາຍເຖິງ ແຕ່ງຕັ້ງບາງຄົນໃຫ້ເຮັດວຽກອັນໃດອັນນຶ່ງ.
- ບາງເທື່ອຄໍາວ່າ "ຍົກຂຶ້ນ"ໝາຍເຖິງ"ນໍາກັບຄືນມາ"ຫຼື"ສ້າງໃໝ່."
- ຄໍາວ່າ"ຍົກຂຶ້ນ"ມີຄວາມໝາຍພິເສດໃນຄໍາເວົ້າທີ່ບອກວ່າ,"ເປັນຂຶ້ນຈາກຄວາມຕາຍ"ໝາຍເຖິງ ເຮັດໃຫ້ຄົນຕາຍກັບມີຊີວິດຂຶ້ນມາອີກເທື່ອນຶ່ງ.
- ບາງເທື່ອ"ຍົກຂຶ້ນ"ໝາຍເຖິງ"ຍົກຍ້ອງ"ບາງຄົນຫຼືບາງສິ່ງ

"ເປັນຂຶ້ນ"ຫຼື"ລຸກຂຶ້ນ"ໝາຍເຖິງ"ຂຶ້ນໄປ"ຫຼື"ຢືນຂຶ້ນ"ຄໍາວ່າ"ຟື້ນຂຶ້ນມາແລ້ວ" "ລຸກຂຶ້ນມາແລ້ວ" ຄໍາເຫຼົ່ານີ້ໃຊ້ໃນການກ່າວເຖິງການເຮັດໃນອະດີດ.

- ເມື່ອບຸກຄົນຢືນຂຶ້ນເພື່ອໄປບ່ອນນຶ່ງ ການເຮັດແນວນີ້

ສະແດງວ່າ "ເຂົາໄດ້ຢືນຂຶ້ນແລະໄດ້ໄປແລ້ວ"

- ຖ້າມີອັນໃດອັນນຶ່ງ "ເກີດຂຶ້ນ"ໝາຍຄວາມວ່າ ອັນນັ້ນ "ເກີດຂຶ້ນ"ຫຼື "ເລີ່ມເກີດຂຶ້ນ."
- ພຣະເຢຊູໄດ້ຊົງທໍານວາຍວ່າ ພຣະອົງຈະຊົງ "ຟື້ນຂຶ້ນຈາກຄວາມຕາຍສາມວັນຫລັງຈາກພຣະເຢຊູສະເດັດສູ່ສະຫວັນທູດສະຫວັນໄດ້ກ່າວວ່າ"ພຣະອົງໄດ້ຊົງຟື້ນຂຶ້ນມາແລ້ວ."

### ຄໍາແນະນໍາໃນການແປ

- ຄໍາວ່າ"ຍົກຂຶ້ນ"ຫລື"ຍົກຂຶ້ນສູງ"ສາມາດແປໄດ້ວ່າ"ຍົກຊູຂຶ້ນ"ຫລື"ເຮັດໃຫ້ສູງຂຶ້ນ."
- ຍົກຂຶ້ນສູງ"ສາມາດແປວ່າ"ເຮັດໃຫ້ເກີດຂຶ້ນ"ຫລື"ແຕ່ງຕັ້ງ"ຫລື"ນໍາມາໃຫ້ເກີດຂຶ້ນ."
- "ຍົກກໍາລັງຂອງສັດຕູຂອງທ່ານຂຶ້ນ"ສາມາດແປວ່າ "ເຮັດໃຫ້ສັດຕູຂອງທ່ານເຂັ້ມແຂງຫລາຍ."
- ປະໂຫຍກ "ຍົກບາງຄົນໃຫ້ຟື້ນຄືນຈາກຄວາມຕາຍ"ສາມາດແປວ່າ "ເປັນເຫດໃຫ້ບາງຄົນກັບມາຈາກຄວາມຕາຍສູ່ຊີວິດ"ຫລື"ເປັນເຫດໃຫ້ບາງຄົນກັບມາມີຊີວິດ."
- ຂຶ້ນຢູ່ກັບບໍຣິບົດ"ຍົກຂຶ້ນສູງ"ສາມາດແປວ່າ"ຈັດຕຽມ"ຫລື"ແຕ່ງຕັ້ງ"ຫລື"ເປັນເຫດໃຫ້ມີ"ຫລື"ສ້າງຂຶ້ນໃໝ່"ຫລື"ແປງ."
- ປະໂຫຍກ"ເຮັດໃຫ້ເກີດຂຶ້ນແລະໄດ້ໄປ"ສາມາດແປວ່າ"ລຸກຂຶ້ນແລະໄດ້ໄປ"ຫລື"ໄດ້ໄປ."
- ຂຶ້ນຢູ່ກັບບໍຣິບົດ ຄໍາວ່າ"ເຮັດໃຫ້ເກີດຂຶ້ນ"ສາມາດແປວ່າ"ໄດ້ເກີດຂຶ້ນ"ຫລື"ໄດ້ຕັ້ນຂຶ້ນ"ຫລື"ໄດ້ຢືນຂຶ້ນ."

## ຍົກຊູ, ການເທີດທູນ

### ນິຍາມ

ການຍົກຊູແມ່ນການສັນລະເສີນທີ່ສູງສົ່ງແລະການໃຫ້ກຽດບາງຄົນ. ອີກທັ້ງສາມາດໝາຍເຖິງການວາງບາງຄົນໄວ້ໃນຕໍາແໜ່ງທີ່ສູງ.

- ໃນພຣະຄໍາພີ, ຄໍາວ່າ "ຍົກຊູ" ສ່ວນຫລາຍແມ່ນໃຊ້ເພື່ອຍົກຊູພຣະເຈົ້າ.
- ເມື່ອມະນຸດຍົກຊູຕົວເອງ, ນັ້ນໝາຍຄວາມວ່າລາວກໍາລັງຄິດເຖິງຕົວເອງໃນແບບທີ່ອວດຕົວຫລືໂອ້ອວດຈອງຫອງ.

### ຄໍາແນະນໍາໃນການແປ

- ແນວທາງການແປ "ຍົກຊູ" ສາມາດລວມເຖິງ, "ການສັນລະເສີນທີ່ສູງສຸດ" ຫລື "ໃຫ້ກຽດຢ່າງຍິ່ງໃຫຍ່" ຫລື "ຍ້ອງຍໍ" ຫລື "ການເວົ້າສັນລະເສີນ."
- ໃນບາງກໍລະນີ, ສາມາດແປໄດ້ດ້ວຍຄໍາ ຫລືຖ້ອຍຄໍາທີ່ມີຄວາມໝາຍວ່າ, "ການວາງໄວ້ໃນຕໍາແໜ່ງສູງ" ຫລື "ໃຫ້ກຽດຢ່າງຫລວງຫລາຍຂຶ້ນໃຫ້ແກ່" ຫລື "ເວົ້າເຖິງຄວາມຊື່ນຊົມ."
- "ຢ່າຍົກຊູຕົນເອງ" ສາມາດແປໄດ້ອີກວ່າ "ຢ່າຄິດເຖິງຕົນເອງສູງເກີນໄປ" ຫລື "ຢ່າອວດດີກ່ຽວກັບຕົນເອງ."
- "ຄົນເຫລົ່ານັ້ນທີ່ຍົກຊູຕົນເອງ" ສາມາດແປໄດ້ອີກວ່າ "ຄົນເຫລົ່ານັ້ນທີ່ຄິດຢ່າງຈອງຫອງກ່ຽວກັບພວກເຂົາເອງ" ຫລື "ຄົນເຫລົ່ານັ້ນທີ່ໂອ້ອວດກ່ຽວກັບພວກຕົນເອງ.


generated on Thu Jul 10 08:45:04 2025

## ຍົກຍໍ

### ນິຍາມ

ຕາມຕົວອັກສອນແລ້ວຄຳວ່າ "ຍົກຍໍ" ໝາຍເຖິງທຳໃຫ້ບາງສິ່ງຫຼືບາງຄົນຍິ່ງໃຫຍ່ຂຶ້ນຫຼືດີງຄວາມສົນໃຈຕໍ່ຄວາມຍິ່ງໃຫຍ່ຂອງບາງຄົນ.

- ເມື່ອໃຊ້ໃນພຣະຄຳພີຄຳວ່າ "ຍົກຍໍ" ປົກກະຕິອ້າງເຖິງການຍົກຍ້ອງກະສັດຫຼືພຣະເຈົ້າ.
- ເມື່ອບຸກຄົນຍົກຍ້ອງຕົນເອງນັ້ນ,ໝາຍຄວາມວ່າເຂົາພູມໃຈແລະພຣະຍາຍາມທຳໃຫ້ຕົນເອງມີຄວາມສຳຄັນຫຼາຍຂຶ້ນກ່ວາຄົນອື່ນ.

### ຄຳແນະນຳໃນການແປ

- ວິທີອື່ນໃນການແປຄຳວ່າ "ຍົກຍໍ" ສາມາດລວມເຖິງ ບອກວ່າຍິ່ງໃຫຍ່ຢ່າງໃດ.

## ຍົກໂທດ, ການຍົກໂທດ

### ນິຍາມ

ຍົກໂທດໃຫ້ບາງຄົນໝາຍເຖິງການບໍ່ຍຶດຕິດກັບຄວາມຂຸ່ນເຄືອງໃຈທີ່ມີຕໍ່ບຸກຄົນຜູ້ທີ່ໄດ້ທຳບາງສິ່ງທີ່ແສນເຈັບປວດ. "ການຍົກໂທດ" ຄືການກະທຳຂອງການຍົກໂທດໃຫ້ບາງຄົນ.

- ການຍົກໂທດໃຫ້ບາງຄົນ ຫຼາຍໆຄັ້ງໝາຍເຖິງການບໍ່ລົງໂທດຄົນນັ້ນ ສຳລັບສິ່ງທີ່ບໍ່ຖືກຕ້ອງທີ່ເຂົາໄດ້ກະທຳ.
- ຄຳນີ້ສາມາດໃຊ້ໃນຮູບການປຽບທຽບທີ່ໝາຍເຖິງ, "ຍົກເລີກ" ເພື່ອເປັນການສະແດງອອກ "ຍົກເລີກໜີ້".
- ເມື່ອມະນຸດນັ້ນສາລະພາບບາບຂອງພວກເຂົາ,ພຣະເຈົ້າຍົກໂທດພວກເຂົາບົນພື້ນຖານການເສັຽສະຫຼະຂອງພຣະເຢຊູທີ່ຍອມຕາຍເທິງໄມ້ກາງແຂນ.
- ພຣະເຢຊູຊົງໄດ້ສອນສາວົກຂອງພຣະອົງໃຫ້ຍົກໂທດຄົນອື່ນເພາະພຣະອົງຊົງໄດ້ຍົກໂທດແກ່ພວກເຂົາ.

### ຄຳແນະນຳການໃນແປ

- ຄຳວ່າ "ຍົກໂທດ" ສາມາດແປໄດ້ອີກວ່າ "ອະພັຍ" ຫຼື "ຍົກເລີກ" ຫຼື "ປົດປ່ອຍ" ຫຼື "ບໍ່ຖືສາ" ທັ້ງນີ້ຂຶ້ນຢູ່ກັບບໍຣິບົດນັ້ນໆ.

## ຍົວະເຍົ້າ

### ນິຍາມ

ຄຳວ່າ "ຍົວະໃຫ້ມີອາລົມຮ້າຍ" ໝາຍເຖິງເຮັດໃຫ້ບາງຄົນມີປະສົບການກັບປະຕິກິຣິຍາຫລືຄວາມຮູ້ສຶກດ້ານລົບ

- ການຍົວະໃຫ້ມີອາລົມຮ້າຍບາງຄົນໃຫ້ໂມໂຫໝາຍເຖິງການເຮັດບາງສິ່ງບາງຢ່າງທີ່ເຮັດໃຫ້ບຸກຄົນນັ້ນຄຽດ ນີ້ສາມາດແປໄດ້ວ່າ "ການເຮັດໃຫ້ເກີດຄວາມຄຽດ" ຫລື "ຄຽດ"
- ເມື່ອໃຊ້ໃນປະໂຫຍກເຊັ່ນວ່າ "ຢ່າຍົວະໃຫ້ເຂົາມີອາລົມຮ້າຍ" ນີ້ສາມາດແປໄດ້ວ່າ "ຢ່າເຮັດໃຫ້ເຂົາຄຽດ" ຫລື "ຢ່າເຮັດໃຫ້ເຂົາເກີດຄວາມຄຽດ" ຫລື "ຢ່າເຮັດໃຫ້ເຂົາຄຽດກັບທ່ານ"

## ດາບ

### ຂ້ເທັດຈິງ

ດາບ ເປັນ ບຸດຊາຍຄົນທີ່ຫ້າ ຂອງຢາໂຄບ ແລະເປັນນຶ່ງໃນສິບສອງເຜົ່າ ຂອງຄົນອິສຣາເອັນ ເຂດປົກຄອງຕ້ັງຖິ່ນຖານຂອງຊົນເຜົ່າດາບ ຢູ່ທາງ ພາກເໜືອຂອງຄານາອານ ທ້ັງຍ້ັງໄດ້ຮັບຊື່ນີ້ດ້ວ

- ໃນສມັຍຂອງອັບຣາຮາມ ,ມີເມືອງນຶ່ງຊື່ດານຕ້ັງຢູ່ທາງຕາວັນຕົກຂອງ ກຸງເຢຣູຊາເລັມ.
- ຫລາຍປີ ,ຕໍ່ມາໃນຊ່ວງເວລາ ທີ່ຊົນຊາດອິສະຣາເອນເຂ້ົາສູ່ດິນແດນທີ່ພຣະເຈ້ົາຊົ່ງສັນຍາໄວ້ ຍັງມີອີກເມືອງນຶ່ງຊື່ດານຕ້ັງຢູ່ຫ່າງຈາກກຸງ ເຢຣູຊາເລັມໄປທາງເໜືອປະມານ 60 ໄມລ.

' ຄຳວ"ຄົນດານ"ກ່າວເຖິງເຊ້ືອສາຍຂອງດານ ຜູ້ຊ່ົງເປັນພວມສະມາຊິກຂອງຕະກຸນຂອງເຂ້ົາດ້ວຍ.


generated on Thu Jul 10 08:45:04 2025

## ດາຍ

### ນິຍາມ

ດາຍ ແມ່ນອາວຸດໂລຫະທີ່ເຮັດດ້ວຍແຜ່ນເຫລັກແບນໃຊ້ເພື່ອຕັດຫລືແທງ. ມັນມີດ້ານຈັບແລະຍາວທີ່ແຫລມຄົມ.

- ໃບມີດຂອງດາບໃນສະ ໄໝຢູຣານມີຄວາມຍາວປະມານ 60 ຫາ 91 ຊັ້ງຕີແມັດ.
- ດາຍບາງດວງມີສອງຄົມແລະມີຊື່ວ່າດາບສອງເທົ່າຫລືດາບສອງຄົມ.
- ສາວົກຂອງພະເຍຊູຄຣິດມີດາບທີ່ເຂົາເຈົ້າວາງແຜນທີ່ຈະໃຊ້ເພື່ອປ້ອງກັນຕົວເອງ, ເປໂຕໃຊ້ດາບຂອງລາວຕັດຫູຂອງຜູ້ຮັບໃຊ້ຂອງປະໂລຫິດໃຫຍ່.
- ທັງໂຢຮັນບັບຕິສະໂຕແລະອັກຄະສາວົກຢາໂກໂບຖືກຕັດຫົວດ້ວຍດາບທັງສອງຄົມ.

### ຄຳແນະນຳໃນການແປ

- ດາບໄດ້ຖືກໃຊ້ເປັນຄຳປຽບທຽບສຳລັບຄຳສອນຂອງພະເຈົ້າ.ໃນພຣະຄຣິສຕະທຳຄຳພີໄດ້ແທງທະລຸເຖິງຄວາມຄິດພາຍໃນຂອງຄົນແລະເຮັດໃຫ້ພວກເຂົາ ໃນລັກສະນະຄ້າຍຄືກັນກັບດາບທີ່ຈະຕັດໃຫ້ເລິກ, ເຮັດໃຫ້ເກີດຄວາມເຈັບປວດ.

## ດາມັສກັດ

### ຂ້ເທັດຈິງ

ດາມັສກັດ ເປັນ ເມືອງຫລວງ ຂອງ ປະເທດຊີເຣັຍ. ທີ່ຍັງຄົງຕັ້ງຢູ່ໃນສະຖານ ທີ່ດຽວ ກັບ ທີ່ເຄີຍມີຢູ່ໃນ ພຣະຄັມພີກ

- ດາມັສກັດ ເປັນ ເມືອງທີ່ເກົ່າແກ່ ທີ່ສຸດເມືອງນຶ່ງໃນໂລກ ທີ່ຍັງມີຜູ້ຄົນອາສັຍຢູ່ຢ່າງຕໍ່ເນື່ອງ.
- ໃນຊ່ວງ ເວລາ ຂອງ ອັບຣາຮາມ ດາມັສກັດເປັນເມືອງຫລວງ ຂອງອານາ ຈັກອາຣັມ ( ຄືທີ່ຕັ້ງຊີເຣັຍ ໃນປັຈຸບັນ).
- ຕລອດຊ່ອງ ຂອງພັນທະສັນເດີມ ມີການອ້າງຫລາຍຄັ້ງເຖິງການມີຄວາມສຳພັນ ລະຫວ່າງ ລະຫວ່າງຊາວ ດາມັສກັດ ກັບຊາວອິສຣເອັນ.
- ຫລາຍຄຳ ທຳນວາຍ ໃນພຣະຄັມພີທຳນວາຍ ເຖິງການທຳລາຍເມືອງດາມັສກັ໊ດ. ຄຳທຳນວາຍເຫົ່ລານີ ໄດ້ເກີດຂຶ້ນຈິງ ເມືອ ອັດຊີເຣັຍທຳລາຍ ເມືອງນີ້ອີກ ໃນອານາຄົດ ຈົນເມືອງນີ້ຖືກທຳລາຍຈົນໝົດສິ້ນ.
- ໃນພັນທະສັນຍາໃໝ່,ໂຊໂລຄົນເປັນຟາຣີຊາຍ(ພາຍຫັລງເປັນທີ່ຮູ້ຈັກໃນນາມຂອງໂປໂລ) ກຳລັງຈະໄປຈັບກຸມພວກຄຣິສະຕຽນໃນເມືອງດາມັສກັດ ຂະນະເມືອ ພຣະເຢຊູ ໄດ້ປະເຊີນໜ້າກັບເຂົາແລະເຮັດໃຫ້ເຂົາກາຍເປັນຄົນເຊື່ອຄົນນຶ່ງ.

## ດານີເອນ

### ຂ້ເທັດຈິງ

ດານີເອນ ເປັນ ຊາວອິສະຣາເອນ ຜູ້ປະກາດພຣະທັມ ທີ່ເປັນຊາຍໜຸ່ມ ຖືກນຳໄປ ເປັນສະເລີຍໂດຍເນບູກາດເນັດຊາ ກະສັດບາບີໂລນເມືອປະ ມານ 600 ປີກ່ອນກ່ອນຄຣິສະຕະສັກຣາດ.

- ນີ ເປັນຊ່ວງເວລາ ທີ່ຄົນອິສະຣາເອນ ຫລາຍຄົນຈາກຢູດາໄດ້ຖືກນຳໄປເປັນສະເລີຍ ຢູ່ໃນບາບີໂລນເປັນເວລາ 70 ປີ.
- ດານີເອນໄດ້ຮັບຊື່ເປັນພາສາບາບີໂລນ ວ່າເບັນເຕຊັດຊາ
- ດານີເອນ ເປັນຄົນໜຸ່ມ ທີ່ໜ້າຍົກຍ້ອງແລະຊອບທັມ ເປັນຜູ້ທີ່ເຊື່ອຟັງ ພຣະເຈົ້າ.
- ພຣະເຈົ້າ ໄດ້ຊ່ວຍເຫລືອ ໃຫ້ດານີເອນແປຄວາມຝັນ ຫລືນິມິດຫລາຍຢ່າງສຳຫລັບ ກະສັດບາບີໂລນ.
- ເພາະ ຄວາມສາມາດນີ ແລະລັກສະນະນິສັຍທີ່ໜ້າຍົກຍ້ອງສັນຣະເສີນຂອງເຂົາ ,ດານີເອນຈຶ່ງໄດ້ຮັບຕຳແໜ່ງ ຜູ້ນຳລະດັບສູງໃນອາ ນາຈັກບາບີໂລນ.
- ຫລາຍ ປີ ຕໍ່ມາ ,ສັຕຕູຂອງ ດານີເອນ ໄດ້ໃຊ້ກົນອຸບາຍເຮັດໃຫ້ດາຣີອັດ ກະສັດ ບາບີໂລນ ອອກກົດໝາຍ ຫ້າມບໍ່ໃຫ້ມີການນະມັສະ ການ ຜູ້ໃດ ຍົກເວັ້ນແຕ່ກະສັດ ດານີເອນຍັງຄົງ ອະທິຖານຕໍ່ພຣະເຈົ້າ, ຢ່າງຕໍ່ເນື່ອງ ດັ່ງນັ້ນເຂົາຈຶ່ງຖືກຈັບ ແລະຖືກໂຍນເຂົ້າໄປໃນຖ້ຳສິງ ໂຕ. ແຕ່ພຣະເຈົ້າ,ໄດ້ຊົງຊ່ວຍປົກປ້ອງ ລາວແລະລາວບໍ່ໄດ້ຮັບອັນຕລາຍໄດໆເລີຍ.


generated on Thu Jul 10 08:45:04 2025

## ດາວິດ

### ຂໍ້ເທັດຈິງ

ດາວິດ ເປັນກະສັດ ອົງທີສອງ ຂອງອິສະຣາເອນ ພຣະອົງຊົງຮັກ.ແລະ ປະຕິບັດພຣະເຈົ້າ ພຣະອົງເປັນນັກຂຽນ ຫລັກພຣະທັມເພງສັນລະເສີນ.

- ເມືອ ດາວິດ ຍັງ ເປັນເດັກນ້ອຍ ໄດ້ດູແລ ແກະຂອງຄອບຄົວລາວ, ພຣະເຈົ້າຊົງເລືອກລາວ ໃຫ້ເປັນກະສັດຄົນຕໍ່ໄປ ຂອງອິສະຣາເອນ.
- ດາວິດ ໄດ້ກາຍເປັນ ນັກລົບ ຜູ້ຍິ່ງໃຫ່ຍ ແລະ ນໍາກອງທັບ ອິສະຣາເອນ ເຂົ້າສູ່ສົງຄາມ ກັບສັດຕູຂອງ.ພວກເຂົາ ໄຊຊະນະຂອງພະອົງ ເໜືອ ໂກລີອາດ ຄົນຟີລີສຕີນ ເປັນທີຮູ້ຈັກກັນດີ.
- ກະສັດ ຊາອູນ ໄດ້ຊົງພະຍາຍາມ ທີຈະຂ້າດາວິດ ແຕ່ພຣະອົງໄດ້ຊົງກັບໃຈແລະແລະພຣະເຈົ້າໄດ້ຊົງອະພັຍໂທດໃຫ້ພຣະອົງ.
- ດາວິດ ໄດ້ຊົງທໍ້ານາຍ ຢ່າງໃຫຍ່ຫລວງ, ແຕ່ພຣະອົງ ໄດ້ຊົງກັບໃຈ ແລະ ພຣະເຈົ້າໄດ້ຊົງ ອະພັຍໂທດໃຫ້ພຣະອົງ.
- ພຣະເຢຊູ ພຣະເມສັອາ ໄດ້ຊົງຖືກເອີນວ່າ " ລູກຂອງດາວິດ" ເພາະວ່າ ພຣະອົງຊົງເປັນ ເຊືອສາຍ ຂອງກະສັກດາວິດ.

## ດີ,ຄວາມດີ

### ນິຍາມ

ຄໍາວ່າ "ດີ "ມີຄວາມໝາຍແຕກຕ່າງກັນຂຶນຢູ່ກັບບໍຣິບົດ. ຫລາຍພາສາຈະໃຊ້ຄໍາອືນໃນການແປຄວາມໝາຍທີແຕກຕ່າງກັນເຫຼົ່ານີ.

- ໂດຍທົ່ວໄປສິ່ງທີດີຄືຖ້າສິ່ງນັນ ເໝາະສົມກັບພຣະລັກສະນະຂອງພຣະເຈົ້າ, ວັດຖຸປະສົງແລະນໍ້າພຣະທັຍຂອງພຣະອົງ.
- ບາງສິ່ງທີ "ດີ" ສາມາດເປັນຄວາມພໍໃຈ ດີເລີດ, ເປັນປະໂຫຍດ

ເໝາະສົມ, ມີກໍາໄລ,ຫລືຖືກຕ້ອງຕາມຫລັກສິລະທັມ.

- ທີດິນທີ"ດີ "ສາມາດເອີນໄດ້ອີກວ່າ "ສົມບູນ" ຫລື "ປະສົດທິຜົນ".
- ພືດຜົນທີ "ດີ" ສາມາດເປັນພືດຜົນທີ "ສົມບູນ."
- ບຸກຄົນສາມາດ"ດີ" ໃນສິ່ງທີພວກເຂົາເຮັດ,ຖ້າພວກເຂົາຊໍານານໃນງານຫລືອາຊີບຂອງພວກເຂົາເຊັ່ນດຽວກັບໃນ, "ຊາວນາທີດີ".
- ໃນພຣະຄັມພີ ຄວາມໝາຍຫົວໄປຂອງຄໍາວ່າ "ດີ" ມັກກົງກັນຂວ້າມກັບຄໍາວ່າ "ຊົ່ວຮ້າຍ".
- ຄໍາວ່າ "ຄວາມດີ" ປົກກະຕິແລ້ວໝາຍເຖິງການເປັນຄົນທີຢູ່ໃນສິລະທັມທີດີຫລືມີຄວາມຄິດແລະການກະທໍາທີເປັນທັມ.
- ຄວາມດີຂອງພຣະເຈົ້າອ້າງເຖິງວ່າພຣະອົງໄດ້ອວຍພອນແກ່ມະນຸດ"ຢ່າງໃດ,ໂດຍການໃຫ້ສິ່ງດີໆ ແລະປະໂຫຍດທີດີ. ນອກຈາກນີຍັງສາມາດອ້າງເຖິງຄວາມສົມບູນແບບທາງຈະຣິຍະທັມຂອງພຣະອົງ.

### ຄໍາແນະນໍາການແປ

- ຄໍາທົ່ວໄປສໍາຫລັບຄໍາວ່າ"ດີ"ໃນພາສາເປົ້າໝາຍຄວນໃຊ້ຄໍາໃດກໍຕາມທີມີຄວາມໝາຍທົ່ວໄປທີຖືກຕ້ອງແລະເປັນທັມະຊາດ

ໂດຍສະເພາະຢ່າງຍິ່ງໃນບໍຣິບົດທີແຕກຕ່າງຈາກຄວາມຊົ່ວຮ້າຍ.

- ຂຶນຢູ່ກັບບໍຣິບົດວິທີອືນໃນການແປຄໍານີອາດລວມເຖິງ"ໃຈດີ" ຫລື"ດີເລີດ" ຫລື" ທີຊົນຊອບຕໍ່ພຣະເຈົ້າ" ຫລື "ຊອບທັມ"ຫລື

ສິລະທັມທີຕັ້ງຂຶນ" ຫລື "ທໍາກໍາໄລໄດ້".

- "ດິນແດນທີດີ" ສາມາດແປໄດ້ວ່າ "ແຜ່ນດິນອຸດົມສົມບູນ"

ຫລື "ທີດິນທີມີການຜະລິດ" ພືດທີດີ" ອາດແປໄດ້ອີກວ່າ "ການເກັບກ່ຽວທີອຸດົມສົມບູນ" ຫລື "ພືດຜົນຈໍານວນຫລາຍ"

- ຄໍາເວົ້າ "ທໍາດີຕໍ" ໝາຍເຖິງການທໍາສິ່ງທີເປັນປະໂຫຍດຕໍ່ຜູ້ອືນແລະສາມາດແປເປັນຄໍາວ່າ "ໃຈດີ" ຫລື "ຊ່ວຍ" ຫລື "ປະໂຫຍດ" ກັບຜູ້ນຶງໄດ້.
- "ທໍາດີໃນວັນສະບາໂຕ" ໝາຍຄວາມວ່າ"ເຮັດໃນສິ່ງທີຊ່ວຍ

ຄົນອືນໃນວັນສະບາໂຕ".

- ຂຶນຢູ່ກັບບໍລິບົດ ວິທີການແປຄໍາວ່າ"ຄວາມດີ" ສາມາດລວມເຖິງ"ພຣະພອນ" ຫລື" ຄວາມເມດຕາ" ຫລື ຄວາມສົມບູນແບບທາງຈະຣິຍະທັມ" ຫລື "ຄວາມຊອບທັມ" ຫລື ຄວາມບໍຣິສຸດ."


generated on Thu Jul 10 08:45:04 2025

## ຕະກູນຂອງດາວິດ

### ຂໍ້ເທັດຈິງ

ສຳນວນ "ຕະກູນຂອງດາວິດ" ອ້າງເຖິງຄອບຄົວຫລືລູກຫລານຂອງກະສັດດາວິດ.

- ຄຳນີ້ສາມາດແປໄດ້ວ່າ, "ລູກຫລານຂອງດາວິດ" ຫລື "ຄອບຄົວຂອງດາວິດ" ຫລື "ເຜົ່າພັນຂອງກະສັດດາວິດ."
- ເນື່ອງຈາກພຣະເຢຊູຊົງສືບເຊື້ອສາຍມາຈາກດາວິດ, ພຣະອົງຈຶ່ງຊົງເປັນສ່ວນໜຶ່ງຂອງ "ຕະກູນຂອງດາວິດ."
- ບາງເທື່ອ "ຕະກູນຂອງດາວິດ" ຫລື "ຄົວເຮືອນຂອງດາວິດ" ອ້າງເຖິງຄົນໃນຄອບຄົວຂອງດາວິດທີ່ຍັງຄົງມີຊີວິດຢູ່.
- ໃນເວລາອື່ນໆ ຄຳນີ້ຈະມີຄວາມໝາຍໂດຍທົ່ວໄປແລະໝາຍເຖິງເຊື້ອສາຍທັ້ງໝົດຂອງເຂົາ ລວມເຖິງຄົນເຫລົ່ານັ້ນທີ່ເສຍຊີວິດໄປແລ້ວ.

## ຕະກ່ຽງ

### ນິຍາມ

ຄຳວ່າ " ຕະກ່ຽງ " ໂດຍທົ່ວໄປໝາຍເຖິງບາງສິ່ງທີ່ໃຫ້ແສງສະຫວ່າງ ຕະກ່ຽງຕ່າງ
ທີ່ໃຊ້ໃນສະໄໝພຣະຄຳພີໂດຍປົກກະຕິຈະເປັນຕະກ່ຽງນ້ຳມັນ ປະເພດຂອງຕະກ່ຽງທີ່ໃຊ້ໃນສະໄໝພຣະຄຳພີເປັນພະຫະນະນ້ອຍໆ
ທີ່ບັນຈຸເຊື້ອໄຟໂດຍປົກກະຕິແມ່ນນ້ຳມັນ ທີ່ຈະໃຫ້ແສງສະຫວ່າງເມື່ອມີການຈູດໄຟ.

- ໂດຍທົ່ວໄປຕະກ່ຽງນ້ຳມັນມັກຈະເຮັດມາຈາກເຄື່ອງປັ້ນດິນເຜົາທຳມະດາເຕີມດ້ວຍນ້ຳມັນໝາກກອກ
  ຜ້ອມດ້ວຍໄສ້ຫຍ້ວນໃນນ້ຳມັນເພື່ອຈູດໄຟ.
- ຕະກ່ຽງບາງດວງ ຖ້ວຍ ຫຼື ໄຫ ເຮັດເປັນລູກໄຂ່ ແລະຕອນປາຍຫນີບເພື່ອວາງຕະກ່ຽງ.
- ຕະກ່ຽງນ້ຳມັນສາມາດຖື ຫຼື ວ່າງໄວ້ເທິງແທ່ງເພື່ອໃຫ້ແສງສະຫວ່າງສ່ອງໄປທົ່ວບ້ານ.
- ໃນພຣະຄຳພີຕະກ່ຽງຖືກໃຊ້ໃນຄຳອຸປະມາຫຼາຍທາງວ່າເປັນສັນຍາລັກຄວາມສະຫວ່າງ ແລະ ຊີວິດ.

## ຕົ້ກກະແຕນ

### ນິຍາມ

ຄຳວ່າ " ຕົ້ກກະແຕນ " ອ້າງອີເຖິງຕົ້ກກະແຕນທີ່ມີຂະຫນາດໃຫ່ຍທີ່ບິນໄດ້ເຊິ່ງບາງເທື່ອກໍ່ບິນມາເປັນຝູງ ແລະ
ທຳລາຍລ້າງກັດກິນພືດພັນທັ້ງຫມົດຕາມເສັ້ນທາງທີ່ມັນຜ່ານ

- ຕົ້ກກະແຕນ ແລະ ຕົ້ກກະແຕນສະນິດອື່ນໆ ເປັນແມງໄມ້ທີ່ມີຂະຫນາດໃຫ່ຍ ມີປີກຍາວ
  ມີຂ້ຂາຫລັງຍາວທີ່ເຮັດໃຫ້ພວກມັນໂດດເຕ້ນໄປໄດ້ໄກ.
- ໃນພັນທະສັນຍາເດີມ ຝູງຕົ້ກກະແຕນ ຖືກອ້າງອີງໃນເຊິ່ງອຸປະມາເປັນສັນຍາລັກ ຫລື
  ພາບຂອງການທຳລາຍລ້າງຢ່າງໃຫ່ຍຫຼວງທີ່ເປັນຜົນມາຈາກການບໍ່ເຊື່ອຟັງຂອງຄົນອິດສະເອນ.
- ພຣະເຈົ້າໄດ້ສົ່ງຝູງຕົ້ກກະແຕນເປັນຫນຶ່ງໃນໄພພິບັດສິບປະການຕໍ່ພວກເອຢິບ.
- ພະສັນຍາໃຫ່ມກ່າວວ່າຕົ້ກກະແຕນເປັນອາຫານຫລັກຂອງໂຢຮັນຜູ້ໃຫ້ບັບຕິສະມາໃນຕອນທີ່ລາວອາໃສ່ຢູ່ໃນທະເລຊາຍ.

## ຕົ້ກເຕືອນ, ໃຫ້ສະຕິ

### ນິຍາມ

ຄຳວ່າ "ຕົ້ກເຕືອນ" ໝາຍເຖິງການເຕືອນ ຫລືການແນະນຳບາງຄົນຢ່າງແທ້ຈິງ.

- ຕາມປົກຕິແລ້ວຄຳວ່າ "ຕົ້ກເຕືອນ" ໝາຍເຖິງການແນະນຳບາງຄົນບໍ່ໃຫ້ເຮັດບາງຢ່າງ.
- ໃນພຣະກາຍຂອງພຣະຄຣິດ, ພວກຜູ້ເຊື່ອຖືກສອນໃຫ້ເຕືອນສະຕິຊຶ່ງກັນແລະກັນເພື່ອຫລີກເວັ້ນຄວາມບາບແລະໃຫ້ໃຊ້ຊີວິດຢ່າງບໍຣິສຸດ.
- ຄຳວ່າ "ຕົ້ກເຕືອນ" ອາດຈະແປວ່າ "ການໝູນໃຈບໍ່ໃຫ້ເຮັດບາບ" ຫລື "ເຕືອນບາງຄົນບໍ່ໃຫ້ເຮັດບາບ."


generated on Thu Jul 10 08:45:04 2025

## ຕັດອອກ

### ນິຍາມ

ຄໍາເວົ້າທີ່ວ່າ "ຖືກຕັດອອກ"ເປັນການສະແດງອອກທີ່ໝາຍເຖິງ ການໄດ້ຮັບການຍົກເວັ້ນ ເນຣະເທດ ຫຼືແຍກອອກຈາກກຸ່ມຫຼັກ ນອກຈາກນີ້ ຍັງສາມາດອ້າງເຖິງການຖືກຂ້າຕາຍວ່າເປັນ ການພິພາກສາຂອງພຣະເຈົ້າສໍາຫຼັບຄວາມບາບ.

- ໃນພັນທະສັນຍາເດີມ
  ການບໍ່ເຊື່ອຟັງຄໍາສັ່ງຂອງພຣະເຈົ້າທໍາໃຫ້ຖືກຕັດຂາດຫຼືຖືກແຍກອອກຈາກປະຊາຊົນຂອງພຣະເຈົ້າແລະຈາກພຣະພັກຂອງພຣະເຈົ້າ.
- ພຣະເຈົ້າຍັງໄດ້ກ່າວວ່າ ພຣະອົງຈະ"ຕັດຂາດຫຼືທໍາລາຍປະເທດທີ່ບໍ່ແມ່ນປະເທດອິດສະຣາເອນເພາະພວກເຂົາບໍ່ໄດ້ນະມັດສະການ ຫຼື ເຊື່ອຟັງພຣະອົງແລະເປັນສັດຕູຂອງອິດສະຣາເອນ.
- ສໍານວນ " ຖືກຕັດອອກ " ຍັງໃຊ້ເພື່ອອ້າງເຖິງພຣະເຈົ້າ ເຮັດໃຫ້ແມ່ນ້ໍາຢຸດໄຫຼ.

### ຄໍາແນະນໍາໃນການແປ

- ສໍານວນ"ຖືກຕັດອອກ" ອາດແປວ່າ "ຖືກເນຣະເທດ" ຫຼື "ຖືກສົ່ງອອກໄປ" ຫຼື ຖືກແຍກອອກຈາກ" ຫຼື "ຖືກຂ້າ"

ຫຼື "ຖືກທໍາລາຍ".

- "ຕັດອອກ"ອາດແປວ່າ "ທໍາລາຍ"ຫຼື "ສົ່ງອອກໄປ" ຫຼື "ແຍກອອກ" ຫຼື "ທໍາລາຍ" ທັງນີ້ຂຶ້ນຢູ່ກັບສະພາບການນັ້ນໆ.
- ໃນກໍລະນີໃນການໄຫຼຂອງນ້ໍາຖືກຕັດອອກໄປ ສິ່ງນີ້ແປໄດ້ວ່າ

"ຖືກຢຸດ" ຫຼື "ເປັນເຫດໃຫ້ເກີດການຢຸດໄຫຼ"ຫຼື " ຖືກແບ່ງ"

- ຄວາມໝາຍຕົວອັກສອນຂອງການຕັດບາງສິ່ງດ້ວຍມີດຄວນຈະແຕກຕ່າງຈາກການໃຊ້ເປັນທໍານອງການປຽບທຽບຂອງຄໍາເຫຼົ່ານີ້.

## ຕັນຫາ

### ນິຍາມ

ຕັນຫາເປັນຄວາມຕ້ອງການຢ່າງຮຸ່ນແຮງ ໂດຍຫົວໄປຢູ່ໃນສະພາບການຂອງຄວາມຕ້ອງການບາງສິ່ງທີ່ເປັນບາບ ຫຼື ຜິດສິນລະທໍາ

- ໃນພຣະຄໍາພີ ຄໍາວ່າ " ຕັນຫາ " ມັກຈະອ້າງເຖິງຄວາມປາດຖະນາທາງເພດກັບໃຜບາງຄົນທີ່ບໍ່ແມ່ນຄູ່ສາມີຂອງຕົນເອງ
- ບາງຄັ້ງຄໍານີ້ຖືກໃຊ້ໃນປະໂຫຍກໃນເຊິ່ງອຸບປະມາເພື່ອອ້າງເຖິງການນະມັດສະການຮູບເຄົາລົບ
- ຂຶ້ນຢູ່ກັບສະພາບການ " ຕັນຫາ " ສາມາດແປວ່າ " ຄວາມປາດຖະນາທີ່ຜິດ " ຫຼື " ຄວາມປາດຖະນະຢ່າງຮຸ່ນແຮງ " ຫຼື " ຄວາມປາດຖະນາທາງເພດທີ່ຜິດ " ຫຼື " ຄວາມປາດຖະນາຢ່າງຮຸ່ນແຮງທີ່ຈະເຮັດຜິດສິນທໍາ" ຫຼື " ຄວາມປາດຖະນາຢ່າງຮຸ່ນແຮງທີ່ຈະເຮັດບາບ"
- ວະລີ " ມີຕັນຫາພາຍຫລັງ " ສາມາດແປວ່າ " ຄວາມປາດຖະນາຢ່າງຜິດ ງ " ຫຼື " ຄິດຢ່າງຜິດສິນທໍາກ່ ງ ວກັບ" ຫຼື " ຄວາມປາດຖະນາຢ່າງຜິດສິນທໍາ "

( ເບິ່ງເພີ່ມເຕີມ: adultery · idol)

## ຕາມທາງພຣະເຈົ້າ,ຢຸ່ໃນທາງທັມ

### ນິຍາມ

ຄໍາວ່າ"ຕາມທາງຂອງພຣະເຈົ້າ
"ໃຊ້ເພື່ອບັນລະຍາຍເຖິງການກະທໍາຂອງຄົນທີ່ສະແດງອອກແບບໃຫ້ກ ງ ດພຣະເຈົ້າແລະສະແດງວ່າພຣະເຈົ້າຊົ ງ ເປັນແນວໃດ.
"ເປັນເໝືອນພຣະເຈົ້າ" ຄືຄຸນນະພາບຂອງບຸກຄະລິກລັກສະນະທີ່ຖວາຍກ ງ ດແດ່ພຣະເຈົ້າໂດຍການທໍາຕາມພຣະທັຍຂອງພຣະເຈົ້າ.

- ຄົນທີ່ມີບຸກຄະລິກລັກສະນະຕາມທາງພຣະເຈົ້າຈະສະແດງໃຫ້ເຫັນຜົນ ຂອງພຣະວິນຍານບໍຣິສຸດເຊັ່ນ,ຄວາມຮັກ. ຄວາມຊົ່ມຊື່ນຍິນດີ, ສັນຕິສຸກ, ຄວາມອົດທົນ, ຄວາມສຸພາບ,ແລະການບັ ງ ຄັບຕົນ
- ຄຸນນະພາບຂອງຄົນທີ່ຢູ່ໃນທາງທັມສະແດງບຸກຄົນນັ້ນມີພຣະວິນຍານ ບໍຣິສຸດແລະເຊື່ອຟັງພຣະອົງ.


generated on Thu Jul 10 08:45:04 2025

### ຄຳແນະນຳການແປ

ຄຳເວົ້າທີ່ວ່າ "ຕາມທາງພຣະເຈົ້າ" ສາມາດແປໄດ້ອີກວ່າ "ຄົນທີ່ຢູ່ ຕາມທາງພຣະເຈົ້າ" ຫລື "ຄົນທີ່ເຊື່ອຟັງພຣະເຈົ້າ.

## ຕາມທີ່ຂຽນໄວ້

### ນິຍາມ

ຖ້ອຍຄຳທີ່ວ່າ "ຕາມທີ່ຂຽນໄວ້" ຫຼື "ສິ່ງທີ່ຂຽນຂຶ້ນ" ເກີດຂຶ້ນຢູ່ເລື້ອຍໆໃນພັນທະສັນຍາໃໝ່ແລະໂດຍປົກກະຕິໄດ້ໝາຍເຖິງຂໍ້ຄຳສັ່ງຕ່າງໆ ຫຼືຄຳທຳນວາຍຕ່າງໆ ທີ່ໄດ້ຂຽນຂຶ້ນໃນພຣະຄຳພີເປັນພາສາເຮັບເຣີ.

- ໃນບາງຄັ້ງ "ຕາມທີ່ຂຽນໄວ້" ນັ້ນໝາຍເຖິງສິ່ງທີ່ຂຽນໄວ້ໃນພຣະບັນ ຍັດຂອງໂມເຊ.
- ໃນໂອກາດອື່ນໆ ກໍມີຂໍ້ຄວາມທີ່ໝາຍເຖິງສິ່ງທີ່ຜູ້ປະກາດພຣະທຳໄດ້ຂຽນໄວ້ໃນພັນທະສັນຍາເດີມ.
- ນີ້ແມ່ນຖ້ອຍຄຳທີ່ແປວ່າ "ຕາມທີ່ຂຽນໄວ້ໃນພຣະບັນຍັດຂອງໂມເຊ" ຫຼື "ຕາມທີ່ຜູ້ປະກາດພຣະທຳໄດ້ຂຽນໄວ້ແລ້ວນັ້ນ" ຫຼື "ສິ່ງທີ່ກ່າວໄວ້ໃນກົດພຣະບັນຍັດຂອງພຣະເຈົ້າທີ່ໂມເຊໄດ້ຂຽນໄວ້ໃນພຣະຄຳພີເດີມ."
- ມີອີກທາງເລືອກໜຶ່ງຄືການຄົ້ງໄວ້ "ຕາມທີ່ຂຽນໄວ້ " ແລະໃຫ້ເພື່ອເປັນການອະທິບາຍເຖິງຄວາມໝາຍນີ.

## ຕຳ ນິ

### ນິຍາມ

ການຕຳນິຕິຕຽນຜູ້ໃດຜູ້ ໜຶ່ງ ໝາຍ ເຖິງການວິພາກວິຈານຫຼືບໍ່ພໍໃຈຕໍ່ຄຸນລັກສະນະຫຼືການປະພຶດຂອງຄົນນັ້ນ. ຄຳຕຳນິແມ່ນ ຄຳເຫັນທີ່ບໍ່ດີກ່ຽວກັບບຸກຄົນ.

- ການເວົ້າວ່າຄົນຜູ້ໜຶ່ງແມ່ນ "ເໝືອ ຄຳ ຕຳ ນິ" ຫລື "ນອກຄຳ ຕຳນິ" ຫລື "ໂດຍບໍ່ມີຄຳຕຳນິ" ໝາຍຄວາມວ່າບຸກຄົນນີ້ປະພຶດຕົນໃນແບບທີ່ເຄົາລົບພຣະເຈົ້າແລະບໍ່ມີສິ່ງໃດທີ່ເວົ້າໄດ້ໃນການ ຕຳ ນິຕິຕຽນລາວ.
- ຄຳວ່າ“ ຄຳຕຳນິ” ຍັງສາມາດແປເປັນ“ ການກ່າວຫາ” ຫລື“ ຄວາມອັບອາຍ” ຫລື“ ຄວາມ ໜ້າກຽດຊັງ”.
- "ການຕຳນິ" ກໍສາມາດຖືກແປເປັນ "ການຕຳນິ" ຫລື "ກ່າວຫາ" ຫລື "ວິພາກວິຈານ", ຂຶ້ນຢູ່ກັບບໍລິບົດ.

## ຕີຣະຊາ

### ຂ້ເທັດຈິງ

ຕີຣະຊາ ເປັນເມືອງຂອງຊາວການາອານທີ່ສຳຄັນເມືອງໜຶ່ງທີ່ອິດສະຣາເອນມີໄຊຊະນະເໜືອເມືອງນີ. ໄດ້ຊື່ມາຈາກບຸດສາວຂອງກິເລອາດ, ເຊື້ອສາຍຂອງມານາເຊ.

- ເມືອງຕີຣະຊາ ຕັ້ງຢູ່ໃນຂົງເຂດທີ່ຄອບຄອງໂດຍເຜົ່າມານາເຊ. ຄິດກັນວ່າເມືອງນີ້ມັນຢູ່ຫ່າງ 10 ໄມໄປທາງເຫນືອຂອງເມືອງເຊເຄມ.
- ຫລາຍປີຕໍ່ມາ, ຕີຣະຊາໄດ້ກາຍເປັນເມືອງຫລວງຊົ່ວຄາວຂອງອານາຈັກອິດສະຣາເອນທາງເຫນືອ, ສະໄໝການປົກຄອງຂອງກະສັດສີພຣະອົງຂອງອິດສະຣາເອນ.
- ຕີຣະຊາ ຍັງເປັນຊື່ຂອງຫລານສາວຄົນກົກຂອງມານາເຊຄົນໜຶ່ງທີ່ຂໍແບ່ງສ່ວນຫນຶ່ງຂອງແຜ່ນດິນ, ເນື່ອງຈາກພວກເຂົາບໍ່ມີພີນ້ອງທີ່ເປັນຜູ້ຊາຍທີ່ຈະໄດ້ຮັບມໍລະດົກຕາມປະເພນີ.

## ຕີຂີໂກ

### ຂ້ເທັດຈິງ

ຕີຂີໂກ ເປັນຄົນໜຶ່ງໃນເພື່ອນຜູ້ຮັບໃຊ້ຂ່າວປະເສີດຂອງໂປໂລ.

- ຕີຂີໂກ ຮ່ວມກັບໂປໂລຢ່າງນ້ອຍໜຶ່ງເທື່ອໃນການເດີນທາງໄປປະກາດເຜີຍແຜ່ຂອງເພິ່ນໄປທີ່ເອເຊຍ.
- ໂປໂລໄດ້ອະທິບາຍເຖິງຕີຂີໂກ ວ່າ "ຜູ້ທີ່ເປັນທີ່ຮັກ" ແລະ "ຜູ້ທີ່ຊື່ສັດ."
- ຕີຂີໂກ ໄດ້ນຳຈົດຫມາຍຂອງໂປໂລໄປຫາເມືອງເອເຟໂຊແລະເມືອງ ໂກໂລຊາຍ.


generated on Thu Jul 10 08:45:04 2025

## ຕີຄວາມ, ການຕີຄວາມ

### ນິຍາມ

ຄຳວ່າ "ຕີຄວາມ" ແລະ "ການຕີຄວາມ" ອ້າງເຖິງການເຂົ້າໃຈແລະການອະທິບາຍຄວາມໝາຍຂອງບາງສິ່ງທີ່ບໍ່ຊັດເຈນ

- ຫລາຍຄັ້ງໃນພຣະຄຳພີ ຄຳເຫລົ່ານີ້ຖືກໃຊ້ກ່ຽວເນື່ອງກັບການອະທິບາຍຄວາມໝາຍຂອງຄວາມຝັນຫຼືນິມິດ
- ເມື່ອກະສັດບາບີໂລນໄດ້ຝັນເຖິງສິ່ງທີ່ຊັບຊ້ອນ
  ພຣະເຈົ້າຊົງຊ່ອຍໃຫ້ດານີເອນເຂົ້າໃຈແລະອະທິບາຍຕີຄວາມໝາຍຂອງຄວາມຝັນເຫລົ່ານັ້ນ
- ຄຳວ່າ "ການຕີຄວາມ" ຂອງຄວາມຝັນຄື "ການອະທິບາຍ" ຄວາມໝາຍຂອງຄວາມຝັນ
- ໃນພຣະຄຳພີເດີມພຣະເຈົ້າຈະຊົງສຳແດງແກ່ຜູ້ຄົນວ່າຈະເກີດສິ່ງໃດຂຶ້ນໃນອານາຄົດ
  ດັ່ງນັ້ນການຕີຄວາມຂອງຄວາມຝັນເຫລົ່ານັ້ນກໍໄປຄຳພຣະຍາກອນ
- ຄຳວ່າ "ຕີຄວາມ" ສາມາດໃຊ້ຄາດຄະເນຄວາມໝາຍຂອງ
  ສິ່ງອື່ນເຊັ່ນຄາດຄະເນວ່າອາກາດຈະເປັນຢ່າງໃດໂດຍໃຊ້ຂໍ້ມູນຈາກຄວາມຮ້ອນຫຼືຄວາມໜາວມີລົມແຮງຫຼືມີເມກຢ່າງໃດຢ່າງໜຶ່ງ
- ວິທີແປຄຳວ່າ "ຕີຄວາມ" ສາມາດລວມ "ຄາດຄະເນຄວາມໝາຍຂອງ" ຫຼື "ອະທິບາຍ" ຫຼື "ໃຫ້ຄວາມໝາຍຂອງ"
- ຄຳວ່າ "ການຕີຄວາມໝາຍຂອງ"ສາມາດແປວ່າ "ຄຳອະທິບາຍ" ຫຼື"ຄວາມໝາຍ"

## ຕີໂຕ

### ຂ້ເທັດຈິງ

ຕີໂຕເປັນເປັນຊາວຕ່າງຊາດທີ່ໄດ້ກາຍເປັນຜູ້ເຊື່ອໂດຍທາງພັນທະກິດຂອງອັກຄະສາວົກໂປໂລ.ທ່ານໄດ້ຮັບການຝຶກຝົນຈາກອັກຄະສາວົກໂປໂລໃຫ້ເປັນຜູ້ນຳໃນຄຣິ

- ຈົດຫມາຍສະບັບໜຶ່ງຂອງໂປໂລທີ່ຂຽນເຖິງຕີໂຕເປັນພຣະທຳເຫລັ້ມໜຶ່ງໃນພຣະຄຳພີໃໝ່.
- ໃນຈົດໝາຍສະບັບນີ້ໂປໂລໄດ້ສອນຕີໂຕໃຫ້ເປັນຜູ້ແຕ່ງຕັ້ງຜູ້ປົກຄອງຄຣິດສະຈັກຕ່າງໆ ເທິງເກາະກະເຣເຕ.
- ໃນຈົດຫມາຍສະບັບອື່ນໆ ໂປໂລໄດ້ກ່າວເຖິງຕີໂຕວ່າເປັນບາງຄົນທີ່ສ້ຽເສີມແລະນຳຄວາມຍິນດີມາໃຫ້.

## ຕີໂມທຽວ

### ຂ້ເທັດຈິງ

ຕີໂມທຽວເປັນຊາຍໜຸ່ມຈາກເມືອງລີສະຕຣາທີ່ໄດ້ກາຍເປັນຜູ້ເຊື່ອໃນພຣະຄຣິດຢັນເປັນຜົນມາຈາກການພັນທະກິດຂອງໂປໂລໃນເມືອງຂອງລາວ.
ຫລັງຈາກນັ້ນລາວໄດ້ເຂົ້າຮ່ວມກັບໂປໂລໃນການເດີນທາງຮ່ວມພັນທະກິດຫລາຍເທື່ອແລະຊ່ວຍລ້ຽງດູຫລາຍຊຸມຊົນຂອງຜູ້ເຊື່ອໃໝ່.

- ພໍ່ຂອງຕີໂມທຽວເປັນຊາວກຣີກ, ແຕ່ແມ່ເຖົ້າທັ້ງສອງຄື ລູອີດແລະແມ່ຢູນີຊຂອງລາວເປັນຊາວຢິວແລະເປັນຜູ້ທີ່ເຊື່ອໃນພຣະຄຣິດ.
- ຜູ້ອາວຸໂສທັ້ງຫລາຍແລະໂປໂລໄດ້ແຕ່ງຕັ້ງຕີໂມທຽວຢ່າງເປັນທາງການໃຫ້ໂດຍການວາງມືລົງເທິງລາວແລະອະທິຖານເພື່ອລາວ.
- ຫນັງສືສອງເຫລັ້ມໃນພຣະຄຳພີໃໝ່ (1 ຕີໂມທຽວແລະ 2 ຕີໂມທຽວ)
  ເປັນຈົດຫມາຍທີ່ຂຽນຂຶ້ນໂດຍໂປໂລໃຫ້ຄຳແນະນຳແກ່ຕີໂມທຽວໃນຖານະຜູ້ນຳທີ່ໜຸ່ມແໜ້ນຂອງຄຣິດສະຈັກທ້ອງຖິ່ນຫລາຍແຫ່ງ.

## ຕູບານ

### ຂ້ເທັດຈິງ

ມີຜູ້ຊາຍຫລາຍຄົນໃນພຣະຄຳພີເດີມທີ່ມີຊື່ວ່າ "ຕູບານ"

- ຜູ້ຊາຍທີ່ຊື່ວ່າຕູບານຄົນໜຶ່ງເປັນບຸດຊາຍຂອງຢາເຟດ.
- ຜູ້ຊາຍທີ່ຊື່ວ່າ "ຕູບານ-ກາອິນ" ເປັນບຸດຊາຍຂອງລາເມັກ ແລະເປັນຜູ້ສືບເຊື້ອສາຍຂອງກາອິນ.
- ຕູບານເປັນຊື່ຂອງປະຊາຊົນກຸ່ມໜຶ່ງທີ່ໄດ້ຮັບການກ່າວເຖິງໂດຍຜູ້ປະກາດພຣະທຳເອຊາຢາແລະເອເຊກຽນ.


generated on Thu Jul 10 08:45:04 2025

## ຕົວສັ່ນ

### ນິຍາມ

ຄຳວ່າ "ຕົວສັ່ນ" ໝາຍເຖິງການສັ່ນຫລືຕົວສັ່ນຈາກຄວາມຢ້ານຫລືຄວາມທຸກທໍລະມານຫລາຍ.

- ຄຳນີ້ຖືກໃຊ້ໃຫ້ເຫັນພາບທີ່ໝາຍເຖິງ "ຢ້ານຫລາຍ."
- ບາງເທື່ອຄຳວ່າ "ສັ່ນສະເທືອນ" ອ້າງເຖິງສຽງສັ່ນຂອງພື້ນດິນເພາະເກີດຈາກສຽງດັງຫລາຍ.
- ພຣະຄຳພີກ່າວວ່າ ຕໍ່ພຣະພັກຂອງອົງພຣະຜູ້ເປັນເຈົ້າ ແຜ່ນດິນໂລກຈະສັ່ນສະເທືອນ.
  ນັ້ນສາມາດໝາຍຄວາມວ່າຜູ້ຄົນໃນແຜ່ນດິນໂລກຈະສັ່ນຢ້ານພຣະເຈົ້າ ຫລື ແຜ່ນດິນໂລກຈະສັ່ນເອງ.
- ນີ້ສາມາດແປວ່າ "ຢ້ານ" ຫລື "ຢຳເກງພຣະເຈົ້າ" ຫລື "ສັ່ນສະເທືອນ," ຂຶ້ນຢູ່ກັບບໍລິບົດ.

## ຕົ້ນກົກ, ເຫຼົ່າຕົ້ນກົກ

### ນິຍາມ

ຄຳວ່າ“ ຕົ້ນກົກ” ໝາຍ ເຖິງຕົ້ນໄມ້ທີ່ມີກ້ານຍາວທີ່ເຕີບໃຫຍ່ຢູ່ໃນນ້ຳ,ໂດຍປົກກະຕິແມ່ນລຽບຕາມແຄມແມ່ນ້ຳ ຫຼືສາຍນ້ຳ.

- ຕົ້ນກົກທີ່ເກີດຢູ່ໃນແມ່ນ້ຳໄຫລຂ່ອນທີ່ໂມເຊຖືກເຊືອງຊ້ອນໃນຕອນຍັງເປັນເດັກນ້ອຍກໍຖືກເອີ້ນວ່າ "ຕົ້ນແຝກ". ຕົ້ນແຝກຈະສູງ, ກ້ານໃບເປັນຮູທີ່ເຕີບໃຫຍ່ເປັນກຸ່ມໜາໃນນ້ຳໃນແມ່ນ້ຳ.
- ຜິດທີ່ເປັນເສັ້ນໃຍເຫລົ່ານີ້ໄດ້ຖືກນຳໃຊ້ໃນປະເທດເອຢິບບູຮານສຳລັບເຮັດເຈ້ຍ, ກະຕ່າ, ແລະເຮືອ.
- ກ້ານຂອງຕົ້ນແຝກ ແມ່ນມີຄວາມຍືດຫຍຸ່ນແລະຖືກລົມພັດງ່າຍ.

## ຕົ້ນປາມ

### ນິຍາມ

ຄຳວ່າ "ປາມ" ອ້າງເຖິງຕົ້ນໄມ້ສູງເຊິ່ງໃບມີລັກສະນະຫ່ຽວຍາວແລະອ່ອນ ເຊິ່ງສ່ວນໃບຈະຂຶ້ນໃນຍອດຕົ້ນຂອງມັນມີລັກສະນະຄືໃບພັດ.

- ຕົ້ນປາມໃນພຣະຄຳພີໂດຍທົ່ວໄປແລ້ວອ້າງເຖິງຕົ້ນປາມຊະນິດໜຶ່ງເຊິ່ງອອກລູກເປັນ "ໝາກອິນທະຜາລໍ"
  ສ່ວນໃບແລະກ້ານມີລັກສະນະຄືກັບຂົນນົກ.
- ຕົ້ນປາມໂດຍທົ່ວໄປແລ້ວຈະເຕີບໂຕໃນພື້ນທີ ໆມີລັກສະນະອາກາດຮ້ອນຊຸ່ມ ສ່ວນໃບຈະຂຽວຕະຫຼອດທັ້ງປີ.

ເມື່ອພຣະເຢຊູສະເດັດເຂົ້າສູ່ກຸງເຢຣູຊາເລັມເທິງຫຼັງຄາ,ປະຊາຊົນໄດ້ປູໃບປາມລົງທີ່ພື້ນຕໍ່ແຖວໃບປາມຕໍ່ພຣະພັກພຣະອົງ.

- ກ້ານປາມເປັນສັນຍາລັກແຫ່ງສັນຕິພາບແລະການສະເຫລີມສະຫລອງໄຊຊະນະ.

## ຕົ້ນເຂົ້າບາເລ

### ນິຍາມ

ເຂົ້າບາເລເປັນເຂົ້າປະເພດໜຶ່ງທີ່ປະຊາຊົນປູກເພື່ອເປັນອາຫານ ເມື່ອພຣະຄຳພີເວົ້າເຖິງ "ເຂົ້າ" ຫຼື "ເມັດ"
ບາງຄັ້ງກໍກຳລັງເວົ້າເຖິງເຂົ້າບາເລຫຼືເມັດເຂົ້າບາເລ.

- ເມັດເຂົ້າບາເລຫລືເຂົ້າອອກຮວງຂຶ້ນທີ່ປາຍຂອງຕົ້ນເຂົ້າບາເລ.
- ຫຼັງຈາກການເກັບກ່ຽວເຂົ້າບາເລ ເມັດຈະຖືກແຍກອອກຈາກຮວງໂດຍການຍີເມັດອອກ ຕົ້ນຂອງເຂົ້າບາເລເອີ້ນວ່າ "ເຝືອງ"
  ແລະມັດວາງໄວ້ພື້ນເພື່ອໃຫ້ສັດທັ້ງຫຼາຍເປັນບ່ອນນອນ.
- ຫຼັງຈາກຍີເມັດອອກແລ້ວ ເມັດລີບທີ່ຢູ່ຍ້ອມຮອບເມັດຕ່ຳຈະຖືກແຍກອອກໂດຍການຝັດຫຼືຮ່ອນອອກແລະຖິ້ມໄປ.
- ປະຊາຊົນໄດ້ບົດເຂົ້າບາເລໃຫ້ເປັນແປ້ງ ແລະໃຊ້ເຂົ້າບາເລເຮັດເປັນເຂົ້າໜົມປັ້ງ.


generated on Thu Jul 10 08:45:04 2025

## ຕົ້ນແປກ

### ນິຍາມ

ຄຳວ່າ "ຕົ້ນແປກ" ກ່າວເຖິງປະເພດຂອງຕົ້ນໄມ້ທີ່ມີສີຂຽວຕະຫລອດທັ້ງປີແລະຕົ້ນໄມ້ທີ່ມີໝາກຮູບຈວຍແລະມີເມັດຢູ່ຂ້າງໃນ.

- ຕົ້ນແປກຍັງກ່າວເຖິງຕົ້ນໄມ້ທີ "ຂຽວຕະຫລອດ"
- ໃນສະໄໝບູຮານ, ໄມ້ຂອງຕົ້ນແປກໄດ້ຖືກໃຊ້ສຳລັບເຮັດເຄື່ອງດົນຕຣີແລະເປັນໂຄງສ້າງສຳລັບສິ່ງກໍ່ສ້າງ ເຊັ່ນ ເຮືອ, ເຮືອນ, ແລະວິຫານ.
- ຕົວຢ່າງ ຕົ້ນແປກທີ່ກ່າວໃນພຣະຄຳພີຄື ຕົ້ນແປກ, ຕົ້ນແປກຊິດາ, ຕົ້ນແປກສາມໃບ, ແລະຕົ້ນຈູນິເປີ.

## ຕົ້ນໂອ๊ກ, ຕົ້ນໝາກກໍ່

### ນິຍາມ

ຕົ້ນ ໂອ๊ກ ຫລືຕົ້ນໝາກກໍ່ ,ເປັນຕົ້ນໄມ້ ສູງທີ່ໃຫ້ຮົ່ມເງົາ ມີລຳຕົ້ນທີ່ໃຫຍ່ ແລະກິ່ງງ່ຳ ທີ່ແຜ່ຂະຫຍາຍອອກ.

- ຕົ້ນໂອ๊ກ ມີເນື້ອໄມ້ທີ່ແຂງ, ເຊິ່ງນຳໄປໃຊ້ໃນການສ້າງເຮືອ ແລະຄາດ ສຳລັບເຮັດສວນ ແອກງົວ ຫລືໄມ້ເທົ້າຄ້ຳຊູ ສຳ້ຫລບຜູ້ສູງອາຍຸ.
- ເມັດຜົດຂອງຕົ້ນໂອ๊ກ ເອີ້ນວ່າ ຜົນຕົ້ນໂອ๊ກ.
- ຂະໜາດ ລຳຕົ້ນຂອງຕົ້ນໂອ๊ກ ບາງຕົ້ນມີຄວາມກວ້ຳງເຖິງ 6 ແມັດ.
- ຕົ້ນໂອ๊ກ ຄືສັນຍາລັກຂອງການມີຊີວິດ ທີ່ຍືນຍາວ ແລະມີຄວາມໝາຍ ອື່ນໆຝ່າຍຈິດວິນຍານ. ໃນພຣະຄັມພີ, ຕົ້ນໂອ๊ກຈະກ່ຽວກັບສະຖານທີ່ບໍຣິສຸດ.

### ຄຳແນະນຳໃນການແປ

- ສະບັບແປ ຫລາຍສະບັບ ຈະໃຊ້ຄຳວ່າ "ຕົ້ນໂອ๊ກ" ຫລາຍກວ່າ "ໂອ๊ກ."
- ຫາກຕົ້ນໂອ๊ກ ບໍ່ເປັນທີ່ຮູ້ຈັກ ໃນວັດທະນະທັມ ຂອງພາສາທີ ຈະໃຊ້ແປ ສາມາດແປວ່າ "ຕົ້ນໂອ๊ກ ເຊິ່ງເປັນຕົ້ນໄມ້ທີ່ໃຫ້ຮົ່ມເງົາຂະໜາດໃຫຍ່ຄືກັບ..." ແລ້ວໃຫ້ບອກຊື ຕົ້ນໄມ້ທ້ອງຖິ່ນ ທີ່ມີລັກສະນະຄ້າຍກັນ.
- ເບິ່ງເພີ່ມເຕີ່ມ : [How to Translate Unknowns]

## ຖວາຍ ຫລືການຖວາຍ

### ນິຍາມ

ການ ຖວາຍ ຄື ການແຍກ ຫລືການກະທຳ ບາງຢ່າງເພື່ອຈຸດປະສົງ ຫລື ໜ້າທີ່ພິເສດ.

- ດາວິດ ໄດ້ຖວາຍ ທອງຄຳ ແລະ ເງິນ ຂອງພຣະອົງແດ່ພຣະເຈົ້າ.
- ຫລາຍເທື່ອຄຳວ່າ " ການຖວາຍ" ອ້າງເຖິງ ວຽກ ຫລື ພິທີການທີ່ເປັນທາງການ ເພື່ອແຍກສິ່ງຂອງ ບາງຢ່າງອອກເປັນພິເສດ.
- ການ ຖວາຍແທ່ນບູຊາ ລວມເຖິງການບູຊາ ແດ່ພຣະເຈົ້າ.
- ເນເຮມີຢາ ນຳຊາວອິສະຣາເອນ ໃນການຖວາຍກຳແພງ ຂອງກຸງເຢຣູຊາເລມ ທີ່ສ້ອມແຊມແລ້ວ ດ້ວຍການຝຶ້ນຟູສັນຍາ ທີ່ຈະໄດ້ໃຊ້ ສະເພາະ ພຣະເຈົ້າຢາເວ ແລະ ດູແລນະຄອນຂອງພຣະອົງ, ເຫດການນີ ລວມເຖິງ ການຖວາຍຂອບຄຸນ ພຣະເຈົ້າ ດ້ວຍເຄື່ອງດົນຕີ ແລະ ການຮ້ອງເພງ.
- ຄຳວ່າ " ມອບຖວາຍ" ອາດແປວ່າ " ມອບຫມາຍໜ້າທີ ເພື່ອວັດຖຸປະສົງສະເພາະ ຫລື " ມອບບາງສິ່ງບາງຢ່າງທີ່ຈະໃຊ້ສຳ້ຫລັບການ ໃຊ້ງານສະເພາະ" ຫລື "ມອບໝາຍໃຫ້ຜູ້ໃດຜູ້ນຶ່ງທຳງານພິເສດ."

## ຖວາຍພຣະສະຫງ່ຳຣາສີ,ຖວາຍກຽດ

### ນິຍາມ

ຄຳວ່າ "ຖວາຍພຣະສະຫງ່ຳຣາສີ"
ໝາຍເຖິງການສະແດງຫລືບອກເຖິງຄວາມຍິ່ງໃຫຍ່ແລະຄວາມສຳ້ຄັນໃນບາງສິ່ງຫລືບາງຄົນ.ຄວາມໝາຍຕາມຕົວອັກສອນຄື "ໃຫ້ກຽດ".

- ມະນຸດສາມາດຖວາຍກຽດແດ່ພຣະເຈົ້າໂດຍການບອກເຖິງສິ່ງດີເລີດທີ່ພຣະອົງໄດ້ກະທຳ.
- ພວກເຂົ້າສາມາດໃຫ້ກຽດພຣະເຈົ້າໂດຍການດຳເນີນຊີວິດໃນແບບທີ່ຖວາຍກຽດແກ່ພຣະອົງແລະສະແດງໃຫ້ເຫັນວ່າພຣະອົງຍິ່ງໃຫຍ່ແລະອັດສະຈັນຂໍ


generated on Thu Jul 10 08:45:04 2025

- ເມື່ອພຣະຄໍາພີເວົ້າວ່າພຣະເຈົ້າໃຫ້ພຣະອົງເອງໄດ້ຮັບກຽດ,
ນັ້ນໝາຍຄວາມວ່າພຣະອົງເປີດເຜີຍແກ່ມະນຸດໄດ້ເຫັນເຖິງຄວາມດີເລີດຍິ່ງໃຫຍ່ຂອງພຣະອົງຫລາຍຄັ້ງສໍາແດງຜ່ານການອັດສະຈັນຕ່າງໆ.
- ພຣະເຈົ້າພຣະບິດາຈະໃຫ້ພຣະເຈົ້າພຣະບຸດໄດ້ຮັບກຽດໂດຍການເປີດເຜີຍແກ່ມະນຸດເຖິງຄວາມດີເລີດສົມບູນໃນພຣະບຸດ,
ຄວາມສະຫງ່າງາມ,ແລະຄວາມຍິ່ງໃຫຍ່.
- ທຸກຄົນທີ່ເຊື່ອໃນພຣະຄຣິດຈະໃຫ້ກຽດແກ່ພຣະເຈົ້າ. ເມື່ອພວກເຂົາຖືກຟື້ນຈາກຄວາມຕາຍ,
ພວກເຂົາຈະຖືກປ່ຽນໃຫ້ສະທ້ອນພຣະສະຫງ່າຣາສີຂອງພຣະອົງແລະສໍາແດງພຣະຄຸນຂອງພຣະອົງແກ່ສັບພະສິ່ງທັ້ງປວງ.

**ຄໍາແນະນໍາການແປ**

- ຄໍານີ້ສາມາດແປວ່າ, "ຖວາຍພຣະສະຫງ່າຣາສີມາສູ່" ຫລື "ເຮັດໃຫ້ຄວາມຍິ່ງໃຫຍ່ເກີດຂຶ້ນ."
- ຄໍາເວົ້າ " ຖວາຍກຽດແດ່ພຣະເຈົ້າ " ສາມາດແປວ່າ " ສັນຣະເສີນພຣະເຈົ້າ.

" ຫຼື " ເວົ້າເຖິງຄວາມຍິ່ງໃຫຍ່ຂອງພຣະເຈົ້າ " ຫຼື" ສໍາແດງວ່າພຣະເຈົ້າຍິ່ງໃຫຍ່ຂະໜາດໃດ " ຫຼື " ໃຫ້ກຽດພຣະເຈົ້າ"

## ຖາມເຖິງ

**ນິຍາມ**

ຄໍາວ່າ "ຖາມເຖິງ" ໝາຍເຖິງການຖາມບາງຄົນເພື່ອໃຫ້ໄດ້ຂໍ້ມູນບາງຢ່າງ "ຖາມເຖິງ"
ມັກຈະໃຊ້ເພື່ອຂໍສະຕິປັນຍາແລະຂໍຄວາມຊ່ວຍເຫຼືອຈາກພຣະເຈົ້າ

- ໃນພັນທະສັນຍາເດີມມີການບັນທຶກຫຼາຍເຫດການທີ່ປະຊາຊົນຖາມພຣະເຈົ້າ
- ຄໍານີ້ຍັງໃຊ້ກັບກະສັດແລະຂ້າລາດຊະການທີ່ທໍາການຄົ້ນຫາໃນບັນທຶກທີ່ເປັນລາຍລັກອັກສອນທາງການ

ກໍຣະນີ"ຖາມເຖິງ" ອາດຈະແປໄດ້ວ່າ "ຖາມ" ຫຼື "ຖາມເຖິງຂໍ້ມູນ"

- ຄໍາເວົ້າ "ທູນຖາມພຣະຢາເວ" ສາມາດແປໄດ້ວ່າ "ທູນຂໍການຊີ້ນໍາຈາກພຣະຢາເວ" ຫຼື "ພຣະເຈົ້າ
ທູນຖາມພຣະຢາເວວ່າຈະເຮັດຢ່າງໃດ"
- "ໄຕ່ຖາມທຸກສຸກຂອງ" ບາງຢ່າງສາມາດແປໄດ້ວ່າ "ຖາມ" ຫຼື "ຖາມເຖິງຂໍ້ມູນກ່ຽວກັບ"
- ເມື່ອພຣະຢາເວເວົ້າວ່າ "ເຮົາຈະບໍ່ຍ້ອມໃຫ້ເຈົ້າມາຖາມເຮົາ" ປະໂຍກນີ້ສາມາດແປໄດ້ວ່າ
"ເຮົາຈະບໍ່ອະນຸຍາດໃຫ້ເຈົ້າຖາມຂໍ້ມູນອັຈາກເຮົາ"ຫຼື "ເຈົ້າຈະບໍ່ໄດ້ຮັບອະນຸຍາດໃຫ້ຂໍຄວາມຊ່ວຍເຫຼືອຫຍັງຈາກເຮົາ"

## ຖືກຂົ່ມເຫັງ , ການຖືກຂົ່ມເຫັງ

**ນິຍາມ**

ຄໍາວ່າ "ຖືກຂົ່ມເຫັງ" ຫລື "ການຖືກຂົ່ມເຫັງ" ເວົ້າເຖິງການປະຕິບັດຕໍ່ບຸກຄົນຫລືຄົນກຸ່ມໜຶ່ງດ້ວຍວິທີການທີ່ໂຫດຮ້າຍຈົນໃຫ້ເກີດອັນຕະລາຍ

- ການຖືກຂົ່ມເຫັງສາມາດເກີດຂຶ້ນກັບບຸກຄົນຫລືຫຼາຍຄົນກໍໄດ້ ມັກຈະມີຄວາມກ່ຽວໂຍງກັບການຊ້ໍາຊາກ
- ຊາວອິດສະລາເອນຖືກຂົ່ມເຫັງໂດຍຄົນຫຼາຍກຸ່ມ ຜູ້ເຊິ່ງໄດ້ໂຈມຕີພວກທ່ານ ຈັບເອົາໄປເປັນຊະເລີຍ ແລະລັກຊັບສິນຈາກພວກທ່ານ
- ຜູ້ຄົນທີ່ຂົ່ມເຫັງຜູ້ອື່ນທີ່ເຊື່ອໃນສາດສະໜາທີ່ຕ່າງໄປຈາກພວກເຂົາຫລືຂົ່ມເຫັງຜູ້ທີ່ອ່ອນແອກວ່າຕົນເອງ
- ຜູ້ນໍາສາສະໜາຊາວຢິວຂົ່ມເຫັງພຣະເຢຊູເພາະພວກເຂົາບໍ່ມັກໃນສິ່ງທີ່ພຣະເຢຊູສັ່ງສອນ
- ຫຼັງຈາກທີ່ພຣະເຢຊູສະເດັດສູ່ສະຫວັນ ຜູ້ນໍາສາສະໜາຊາວຢິວແລະຂ້າລາຊະການຊາວໂຣມພາ
ກັນກໍການຂົ່ມເຫັງບັນດາຜູ້ທີ່ຕິດຕາມພຣະອົງ
- ຄໍາວ່າ "ຂົ່ມເຫັງ" ສາມາດແປອີກຢ່າງໄດ້ວ່າ "ການຖືກກົດຂີ່ຢູ່ເລື້ອຍໆ" ຫລື "ກະທໍາຢ່າງໂຫດຮ້າຍ" ຫລື
"ປະຕິບັດ.ດ້ວຍຄວາມໂຫດຮ້າຍຢ່າງຕໍ່ເນື່ອງ
- ວິທີການແປຄໍາວ່າ "ການຂົ່ມເຫັງ" ນັ້ນສາມາດເວົ້າໄດ້ທັ້ງໝົດ "ການປະຕິບັດດ້ວຍຄວາມໂຫດຮ້າຍ" ຫລື "ການກົດຂີ" ຫລື
"ການປະຕິບັດທີ່ກໍໃຫ້ເກີດຄວາມເຈັບປວດຢ່າງຕໍ່ເນື່ອງ"

## ຖືກຕ້ອງຕາມກົດໝາຍ, ຢ່າງຖືກຕ້ອງຕາມກົດໝາຍ, ບໍ່ຖືກຕ້ອງຕາມກົດໝາຍ

### ນິຍາມ

ຄໍາວ່າ " ຖືກຕ້ອງຕາມກົດໝາຍ " ໝາຍເຖິງສິ່ງທີ່ໄດ້ຮັບການອະນຸຍາດໃຫ້ເຮັດໄດ້ໂດຍສອດຄອງກັບກົດໝາຍ ຫຼື ຂໍ້ຮຽກຮ້ອງອື່ນໆ
ຄໍາກົງກັນຂ້າມກັບຄໍາວ່າ " ຢ່າງຖືກຕ້ອງຕາມກົດໝາຍ " ມີຄວາມໝາຍຫໍາມະດາ ຄື " ບໍ່ຖືກຕ້ອງຕາມກົດໝາຍ. "

- ໃນພຣະຄໍາພີ ຖ້າບາງສິ່ງຖືກກ່າວວ່າເປັນສິ່ງທີ " ຖືກຕ້ອງຕາມກົດໝາຍ "
  ໝາຍຄວາມວ່າໄດ້ຮັບອະນຸຍາດໂດຍຄວາມຊອບທໍາຂອງພຣະເຈົ້າ ຫຼື ໂດຍກົດບັນຍັດຂອງໂມເຊ ແລະ ກົດໝາຍອື່ນໆຂອງຊາວຍິຍິວ
  ບາງສິ່ງນີ້ແມ່ນ " ບໍ່ຖືກຕ້ອງຕາມກົດໝາຍ" ຄືບໍ່ໄດ້ຮັບອະນຸຍາດ ໂດຍກົດໝາຍເຫຼົ່ານັ້ນ.
- ການເຮັດບາງສິ່ງ " ຢ່າງຖືກຕ້ອງຕາມກົດໝາຍ " ໝາຍເຖິງການເຮັດໃນສິ່ງທີ່ຖືກຕ້ອງ ຫຼື " ໃນທາງທີ່ຖືກຕ້ອງ. "
- ມີຫຼາຍສິ່ງຫຼາຍຢ່າງທີ່ກົດໝາຍຂອງຊາວຍິວຖືກພິຈາລະນາວ່າຖືກຕ້ອງຕາມກົດໝາຍ ຫຼື
  ບໍ່ຖືກຕ້ອງຕາມກົດໝາຍນັ້ນບໍ່ໄດ້ມີມິການຕົກລົງກັບພຣະບັນຍັດຂອງພຣະເຈົ້າກ່ຽວກັບການຮັບຜູ້ອື່ນ.
- ຂຶ້ນຢູ່ກັບສະພາບ ວິທີການແປຄໍາວ່າ " ຖືກຕ້ອງຕາມກົດໝາຍ " ສາມາດລວບລວມຄໍາວ່າ " ບໍ່ໄດ້ຮັບອະນຸຍາດ " ຫຼື "
  ຕາມກົດບັນຍັດຂອງພຣະເຈົ້າ " ຫຼື " ຕາມກົດໝາຍຂອງພວກເຮົາ " ຫຼື " ຖືກຕ້ອງ " ຫຼື " ເຂົ້າກັນໄດ້. "
- ວະລີ " ຄືຖືກຕ້ອງຕາມກົດໝາຍ " ສາມາດແປວ່າ " ກົດໝາຍຂອງພວກເຮົາອະນຸຍາດຫຼືບໍ່ " ຫຼື "
  ມັນແມ່ນສິ່ງທີ່ກົດໝາຍຂອງເຮົາອຸນຍາດຫຼືບໍ່?"

## ຖືພາ, ການຖືພາ

### ນິຍາມ

ຄໍາວ່າ "ຖືພາ" ແລະ "ການຖືພາ" ມັກຈະກ່າວເຖິງການຖືພາລູກ. ຄໍານີ້ໃຊ້ກັບສັດທີ່ຖືພາໄດ້.

- ຄໍາວ່າ "ຖືພາລູກ" ສາມາດແປໄດ້ວ່າ, "ມີທ້ອງ" ຫຼືຄໍາບາງຄໍາທີ່ເປັນທີ່ຍອມຮັບໄດ້ໃນການກ່າວເຖິງຄໍານີ.
- ຄໍາທີ່ກ່ຽວຂ້ອງກັບຄໍາວ່າ "ການຖືພາ" ສາມາດແປໄດ້, "ເລີ່ມຕັ້ງທ້ອງ" ຫຼື "ຊ່ວງເວລາທີ່ຖືພາ."
- ຄໍາເຫຼົ່ານີ້ກ່າວເຖິງການສ້າງບາງສິ່ງຫຼືຄວາມຄິດກ່ຽວກັບ ບາງສິ່ງເຊັ່ນ, ແນວຄວາມຄິດ, ແຜນງານ, ຫຼືງານ.
  ການແປຄໍານີ້ໃນຮູບແບບອື່ນໆ ສາມາດລວມເຖິງ, "ຄິດກ່ຽວກັບ" ຫຼື "ແຜນ" ຫຼື"ສ້າງ," ທີ່ຂຶ້ນຢູ່ກັບກໍລະນີນັ້ນໆ.
- ບາງຄັ້ງຄໍານີ້ ສາມາດໃຊ້ເປັນຄໍາປຽບທຽບຢ່າງເຊັ່ນ, "ເມືອຄວາມບາບຕັ້ງທ້ອງ" ທີ່ມີຄວາມໝາຍວ່າ
  "ເມືອຄວາມບາບເລີ່ມເຂົ້າມາຫາງຄວາມຄິດ" ຫຼື ຈຸດເລີ່ມຕົ້ນຂອງບາບ" ຫຼື " ເມືອຄວາມບາບເລີ່ມກໍ່ຕົວຂຶ້ນ ."

## ຖ່ອມຕົວຫລືຫມອບລົງກັບພື້ນ

### ນິຍາມ

ຄໍາວ່າ "ໝອບລົງກັບພື້ນ" ໝາຍເຖິງການນອນຄວ່ໍາໜ້າລົງ ຢຽດອອກເທິງພື້ນ

- "ໝອບລົງກັບພື້ນ" ຫລື ການ "ໝອບຕົວລົງ" ຕໍ່ໜ້າບາງຄົນໝາຍເຖິງຄໍານັບ ໃຫ້ຕໍ່າລົງມາຢ່າງທັນທີທັນໃດຫລືຕໍ່ໜ້າບຸກຄົນນັ້ນ
- ໂດຍທົ່ວໄປຕໍ່າແໜ່ງຂອງການໝອບລົງນີເປັນການຕອບສະຫນອງທີ່ສະແດງໃຫ້ເຫັນເຖິງຄວາມຕົກໃຈຫລືຄວາມປະຫຼາດໃຈແລະຄວາມໜ້າຢ້ານກົວເພາ
  ມັນຍັງເປັນການສະແດງເຖິງກຽດແລະຄວາມເຄົາລົບຂອງຄົນທີ່ຖືກກົ້ມລົງ
- ການໝອບຍັງເປັນວິທີໃນການນະມັດສະການພະເຈົ້າ
  ປະຊາຊົນຫລາຍເທືອຕອບສະຫນອງວິທີນີໃນການຂອບໃຈພະເຢຊູແລະນະມັດສະການເມືອພະອົງໄດ້ກະທໍາສິ່ງອັດສະຈັນຫລືຖວາຍພະກຽດແດ່ພະອົງ
- ຂຶ້ນຢູ່ກັບປະໂຫຍກທີ ວິທີແປ "ໝອບລົງກັບພື້ນ" ສາມາດແປວ່າ "ກົ້ມຫົວລົງດ້ວຍໃຫ້ໃບຫນ້າເບີ່ງທີ່ພື້ນ" ຫລື
  "ນະມັດສະການພະອົງໂດຍນອນກົ້ມໜ້າລົງຕໍ່ໜ້າພະອົງ" ຫລື "ກົ້ມຫົວລົງເຖິງພື້ນໃນຄວາມປະຫຼາດໃຈ" ຫລື "ນມັດການ"
- ຄໍາທີ່ວ່າ"ຈະບໍ່ໝອບຕົນເອງ" ສາມາດແປໄດ້ວ່າ "ຈະບໍ່ນະມັດສະການ" ຫລື "ຈະບໍ່ກົ້ມໜ້າລົງໃນການນະມັດສະການ" ຫລື
  "ຈະບໍ່ກົ້ມກາບແລະນະມັດສະການ"
- "ກົ້ມໜ້າຂອງທ່ານລົງກັບພື້ນ" ສາມາດແປລໄດ້ວ່າ "ນະມັດສະການ" ຫລື "ກົ້ມກາບລົງຕໍ່ໜ້າ"


generated on Thu Jul 10 08:45:04 2025

## ຖ່ອມໃຈ, ຄວາມຖ່ອມໃຈ

### ນິຍາມ

ຄຳວ່າ "ຖ່ອມໃຈ" ອະທິບາຍເຖິງບຸກຄົນທີ່ບໍ່ຄິດວ່າຕົນເອງດີກວ່າຄົນອື່ນ ເຂົາບໍ່ໄດ້ຍົ້ງຫລືທະນົງຕົວ
ການຖ່ອມໃຈຄືຄຸນນະພາບຂອງການເປັນຄົນຖ່ອມ.

- ການຖ່ອມໃຈຕໍ່ພຣະເຈົ້າໝາຍເຖິງການເຂົ້າໃຈຄວາມອ່ອນແອແລະຄວາມບໍ່ສົມບູນແບບເມື່ອປຽບທຽບກັບຄວາມຍິ່ງໃຫຍ່,
  ພະປັນຍາແລະຄວາມສົມບູນແບບຂອງພຣະອົງ.
- ຖ້າຄົນໜຶ່ງຖ່ອມຕົນເອງລົງ, ລາວໃຫ້ຕົນເອງຢູ່ໃນຕຳແໜ່ງທີ່ສຳຄັນນ້ອຍກວ່າ.
- ຄວາມຖ່ອມໃຈຄືການຄິດເຖິງຄວາມຈຳເປັນຂອງຄົນອື່ນຫລາຍກ່ອນຄວາມຕ້ອງການຂອງຕົນເອງ.
- ຄວາມຖ່ອມໃຈຍັງໝາຍເຖິງການຮັບໃຊ້ດ້ວຍທ່າທີສະຫງົບສະງ່ຽມໃນຂະນະທີ່ໃຊ້ຂອງປະທານແລະຄວາມສາມາດຂອງຕົນເອງ.
- ວະລີ "ຖ່ອມໃຈ" ສາມາດແປໄດ້ວ່າ "ຢ່າຈອງຫອງ."
- "ຖ່ອມໃຈລົງຕໍ່ພຣະເຈົ້າ" ສາມາດແປໄດ້ວ່າ,
  "ຍອມມອບຄວາມປະສົງຂອງຕົນເອງໃຫ້ແກ່ພຣະເຈົ້າໂດຍຮັບຮູ້ເຖິງຄວາມຍິ່ງໃຫຍ່ຂອງພຣະອົງ."

## ຖ້ອຍຄຳ

### ນິຍາມ

"ຖ້ອຍຄຳ" ໝາຍເຖິງບາງສິ່ງບາງຢ່າງທີ່ບາງຄົນໄດ້ເວົ້າອອກມາ.

- ຕົວຢ່າງໃນເລື່ອງນີ້ ເຊັ່ນເມື່ອທູດສະຫວັນໄດ້ເວົ້າກັບເຊຄາຣີຢາວ່າ

"ທ່ານບໍ່ເຊື່ອໃນຖ້ອຍຄຳຂອງເຮົາບໍ" ຊຶ່ງໝາຍຄວາມວ່າ "ທ່ານບໍ່ເຊື່ອໃນສິ່ງທີ່ເຮົາໄດ້ເວົ້າ."

- ຄຳນີ້ແມ່ນຕະຫຼອດເວລາທີ່ໝາຍເຖິງຂໍ້ຄວາມທັງໝົດບໍ່ໄດ້ໃຊ້ແຕ່ຄຳດຽວເທົ່ານັ້ນ.
- ບາງຄັ້ງໃນພຣະຄຳພີ "ຖ້ອຍຄຳ" ໝາຍເຖິງທຸກສິ່ງທີ່ພຣະເຈົ້າຊົງສັ່ງວ່າຫຼືສັ່ງເຊັ່ນໃນ "ພຣະເຈົ້າໄດ້ໃຊ້ຄຳເວົ້າຂອງພຣະອົງ" ຫຼື
  "ຖ້ອຍຄຳແຫ່ງຄວາມຈິງ."
- ບາງຄັ້ງ "ຖ້ອຍຄຳ" ໝາຍເຖິງການຫົວໄປເຊັ່ນ "ພະລັງໃນການເວົ້າແລະການກະທຳ" ນັ້ນໝາຍຄວາມວ່າ
  "ພະລັງໃນການເວົ້າແລະມາລະ ຍາດຫຼືການກະທຳ. "
- ການໃຊ້ຄຳໆນີ້ເປັນພິເສດຕໍ່ເມື່ອພຣະເຢຊູໄດ້ເອີ້ນວ່າ "ພຣະວາທະ."

### ຄຳແນະນຳໃນການແປ:

- ວິທີຕ່າງໆໃນການແປ "ຖ້ອຍຄຳ" ຫລື "ເຫຼົ່າຖ້ອຍຄຳ" ຮວມເຖິງ "ການສອນ" ຫຼື "ຂ້ຄວາມ" ຫຼື "ຂ່າວ" ຫຼື "ຄຳກ່າວ" ຫຼື
  "ສິ່ງທີ່ໄດ້ກ່າວ ໄວ້."
- ເມື່ອຄຳນີ້ເວົ້າເຖິງພຣະເຢຊູວ່າເປັນ "ພຣະວາທະ" ຄຳນີ້ອາດຈະແປວ່າ" "ຄຳສອນ" ຫຼື "ຄຳກ່າວ."

## ຖ້ອຍຄຳແຫ່ງຄວາມຈິງ

### ນິຍາມ

ຄຳວ່າ " ຖ້ອຍຄຳແຫ່ງຄວາມຈິງ " ເປັນອີກວິທີໜຶ່ງໃນການເວົ້າເຖິງຄຳສອນຫຼືຄຳສອນຂອງພຣະເຈົ້າ

- ພຣະວັດຈະນະແຫ່ງຄວາມຈິງຂອງພຣະເຈົ້າປະກອບດ້ວຍທຸກຢ່າງທີ່ພຣະເຈົ້າໄດ້ສອນປະຊາຊົນກ່ຽວກັບເລື່ອງຂອງພຣະເຈົ້າ
  ພຣະອົງເອງ ໃນການຊົງສ້າງແລະແຜນການແຫ່ງຄວາມລອດຜ່ານໂດຍທາງພຣະເຢຊູ
- ຄຳນີ້ໝາຍເຖິງຄວາມຈິງທີ່ວ່າສິ່ງທີ່ພຣະເຈົ້າຊົງສັ່ງໃຫ້ເຮົານັ້ນເປັນຄວາມຈິງ ສັດຊື ແລະທ່ຽງທຳ

### ຄຳແນະນຳໃນການແປ

- ນີ້ສາມາດແປໄດ້ວ່າ " ຄຳສອນທີ່ຖືກຕ້ອງຂອງພຣະເຈົ້າ "ຫຼື " ພຣະຄຳຂອງພຣະເຈົ້າຊຶ່ງເປັນຄວາມຈິງ "
- ເປັນສິ່ງສຳຄັນສຳລັບການແປໃນຄຳນີ້ໃຫ້ລວມໄປເຖິງຄວາມໝາຍຂອງຄວາມເປັນຈິງ


generated on Thu Jul 10 08:45:04 2025

## ທອງຄຳ

### ນິຍາມ

ເມືອງບາບີໂລນເປັນເມືອງຫລວງຂອງບາບີໂລນໃນສະໄໝບູ ຮານເປັນສ່ວນໜຶ່ງຂອງອານາຈັກບາບີໂລນ.

- ບາບີໂລນຕັ້ງຢູ່ລຽບຕາມແມ່ນ ້ ຍູເຟຣຕີສ, ໃນບໍລິເວນດຽວກັນກັບຫໍຄອຍບາເບລໄດ້ຖືກສ້າງຂຶ້ນມາຫຼາຍຮ້ອຍປີກ່ອນ.
- ບາງຄັ້ງ ຄຳວ່າບາບີໂລນ ໝາຍເຖິງອານາຈັກບາບີໂລນທັ ງ ໝົດ. ຍົກຕົວຢ່າງ, "ກະສັດແຫ່ງບາບີໂລນ" ປົກຄອງຈັກກະ ພັດທັ ງ ໝົດ,
ບໍ່ແມ່ນແຕ່ເມືອງ.
- ຊາວບາບີໂລນແມ່ນກຸ່ມຄົນທີ່ມີອຳນາດເຊິ ງໄດ້ໂຈມຕີອານາຈັກຢູດາແລະເຮັດໃຫ້ປະຊາຊົນຢູດາຢູ່ໃນປະເທດບາບີໂລນເປັນເວລາ 70
ປີ.
- ສ່ວນໜຶ ງ ຂອງຂົງເຂດນີ້ຖືກເອີ້ນວ່າ "ຄັນເດຍ" ແລະປະຊາຊົນທີ່ອາໄສຢູ່ທີ່ນັ້ນແມ່ນ "ຊາວຄັນເດຍ." ດ້ວຍເຫດນັ້ນ ຄຳສັບທີ່ວ່າ
"Chaldea" ມັກຖືກໃຊ້ເພື່ອອ້າ ງເຖິ ງບາບີໂລນ.
- ໃນພຣະຄຳພີໃໝ່, ຄຳວ່າ "ບາບີໂລນ" ບາງຄັ້ງໃຊ້ເປັນຄຳ ປຽບທຽບເພື່ອກ່າ ວເຖິ ງສະຖານທີ, ຄົນ,
ແລະຮູບແບບການຄິດທີ່ກ່ ຽວຂ້ ອງກັ ບການນະມັ ດສະການຮູ ບປັ ນແລະການປະພຶ ດທີ່ ເຮັ ດຜິ ດບາບອື ນໆ.
- ປະໂຫຍກທີ່ວ່າ "ບາບີໂລນໃຫຍ່" ຫລື "ເມືອງໃຫຍ່ຂອງບາບີໂລນ" ໝາຍ ເຖິ ງການປຽ ບທຽ ບກັ ບເມືອ ງຫລືປະເທ ດ ໜຶ ງທີ່ ໃຫ ຍ່, ຮັ ງມີ,
ແລະມີ ບາບ, ຄືກັ ນກັ ບເມືອ ງບູ ຮານຂອ ງບາບີ ໂລ ນ.

## ບາຣນາບາ

### ຂໍ້ເທັດຈິງ

ບາຣາບາແມ່ນ ໜຶ ງໃນບັ ນດາຄຣິ ດສະຕຽ ນໃນຍຸ ກທໍ າອິ ດທີ ມີ ຊີ ວິ ດຢູ່ ໃນສະ ໄໝ ຂອ ງພວ ກອັ ກຄະ ສາ ວົ ກ.

- ບາຣາບາ ແມ່ ນ ມາ ຈາ ກ ຊົ ນ ເຜົ ່ າ ເລ ວີ ຂອ ງ ຊົ ນ ຍິ ດ ສະ ລາ ເອ ນ ແລ ະ ມາ ຈາ ກ ເກ ່ າ ະ ໄ ຊ ປັ ດ.
- ເມື ອ ໂ ຊ ໂ ລ (ໂ ຢ ໂ ລ) ກ າ ຍ ມ າ ເ ປ ັ ນ ຄ ຣ ິ ດ ສ ະ ຕ ຽ ນ, ບ າ ຣ າ ບ າ ໄ ດ ້ ຮ ຽ ກ ຮ ້ ອ ງ ໃ ຫ ້ ຜ ູ ້ ເ ຊ ື ່ ອ ຖ ື ອ ື ນ ໆ ຍ ອ ມ ຮ ັ ບ ເ ອ ົ ່ າ ລ າ ວ ເ ປ ັ ນ ເ ພ ື ່ ອ ນ ຮ ່ ວ ມ ຄ ວ າ ມ ເ ຊ ື ່ ອ.
- ບ າ ຣ າ ບ າ ຣ ແ ລ ະ ໂ ປ ໂ ລ ໄ ດ ້ ເ ດ ີ ນ ທ າ ງ ໄ ປ ປ ະ ກ າ ດ ຂ ່ າ ວ ດ ີ ກ ່ ຽ ວ ກ ັ ບ ພ ຣ ະ ເ ຢ ຊ ູ ໃ ນ ເ ມ ື ອ ງ ຕ ່ າ ງ ໆ.
- ຊ ື ່ ຂ ອ ງ ລ າ ວ ແ ມ ່ ນ ໂ ຢ ເ ຊ ັ ບ, ແ ຕ ່ ລ າ ວ ຖ ື ກ ເ ອ ີ ້ ນ ວ ່ າ "ບ າ ຣ າ ບ າ," ຊ ຶ ່ ງ ຫ ມ າ ຍ ຄ ວ າ ມ ວ ່ າ "ລ ູ ກ ຊ າ ຍ ທ ີ ່ ໃ ຫ ້ ກ ໍ າ ລ ັ ງ ໃ ຈ."

## ບາຣະໂທໂລມາຍ

### ຂໍ້ເທັດຈິງ

ບາຣະໂທໂລມາຍ ແມ່ນໜຶ ງໃນອັ ກຄະ ສາ ວົ ກສິ ບ ສອ ງ ຄົ ນ ຂອ ງ ພ ຣ ະ ເ ຢ ຊ ູ.

- ບ າ ຣ ະ ໂ ທ ໂ ລ ມ າ ຍ ຄ ຽ ງ ຄ ູ ່ ກ ັ ບ ອ ັ ກ ຄ ະ ສ າ ວ ົ ກ ຄ ົ ນ ອ ື ນ ໆ, ຖ ື ກ ສ ົ ່ ງ ໄ ປ ປ ະ ກ າ ດ ຂ ່ າ ວ ປ ະ ເ ສ ີ ດ ແ ລ ະ ເ ຮ ັ ດ ກ ານ ອ ັ ດ ສ ະ ຈ ັ ນ ໃ ນ ນ າ ມ ຂ ອ ງ ພ ຣ ະ ເ ຢ ຊ ູ
- ລ າ ວ ຍ ັ ງ ແ ມ ່ ນ ໜ ຶ ່ ງ ໃ ນ ບ ັ ນ ດ າ ຜ ູ ້ ທ ີ ່ ໄ ດ ້ ເ ຫ ັ ນ ພ ຣ ະ ເ ຢ ຊ ູ ກ ັ ບ ຄ ືນ ສ ະ ຫ ວ ັ ນ.


generated on Thu Jul 10 08:45:04 2025

- ສອງສາມອາທິດຫລັງຈາກນັ້ນ,
  ລາວໄດ້ຢູ່ກັບພວກອັກຄະສາວົກຄົນອື່ນໆໃນເມືອງເຢຣູຊາເລັມໃນວັນເພັນສເຕຄໍເມື່ອພຣະວິນຍານບໍລິສຸດໄດ້ສະເດັດມາເທິງພວກເຂົາ.

## ບາຣາບັດ

### ຂໍ້ເທັດຈິງ

ບາຣາບັດ ເປັນນັກໂທດຢູ່ກຸງເຢຣູຊາເລັມໃນເວລາທີ່ພຣະເຢຊູຖືກຈັບ.

- ບາຣາບັດ ແມ່ນຄະດີອາຍາຜູ້ທີ່ໄດ້ກໍ່ອາຊະຍາກຳຂອງການຄາດຕະກຳ ແລະການກະບົດຕໍ່ຕ້ານລັດຖະບານ ໂລມ.
- ເມື່ອ ພອນເທີອັດ ປີລາດສະເໜີທີ່ຈະປ່ອຍບາຣາບັດຫລືພຣະເຢຊູປະຊາຊົນໄດ້ເລືອກບາຣາບັດ.
- ດັ່ງນັ້ນປີລາດຈຶ່ງປ່ອຍໃຫ້ບາຣາບັດຖືກປ່ອຍຕົວແຕ່ໄດ້ຕັດສິນໂທດພຣະເຢຊູໃຫ້ຖືກປະຫານຊີວິດ.

## ບາຣູກ

### ຂໍ້ເທັດຈິງ

ບາຣູກ ແມ່ນຊື່ຂອງຜູ້ຊາຍຫລາຍຄົນໃນພຣະສັນຍາເດີມ.

- ມີຄົນໜຶ່ງຊື່ວ່າບາຣູກ (ລູກຊາຍຂອງຊາບາລາ) ໄດ້ເຮັດວຽກຮ່ວມກັບເນເຫມີຢາໃນການສ້ອມແປງກຳແພງເມືອງເຢຣູຊາເລັມ.
- ເຊັ່ນດຽວກັນໃນຊ່ວງເວລາຂອງເນເຫມີຢາ, ອີກບາຣູກ (ລູກຊາຍຂອງໂຄໂລ - ໂຮເຊດ)
  ແມ່ນໜຶ່ງໃນບັນດາຜູ້ນຳທີ່ໄດ້ຕັ້ງຖິ່ນຖານຢູ່ເຢຣູຊາເລັມຫລັງຈາກກຳແພງຂອງເມືອງຖືກສ້າງຂຶ້ນ ໃໝ່.
- ບາຣູກທີ່ແຕກຕ່າງກັນ (ລູກຊາຍຂອງ ເນລີຢາ) ເປັນຜູ້ຊ່ວຍເຜີຍພຣະຄຳ, ແລະຜູ້ທີ່ໄດ້ຊ່ວຍລາວໃນວຽກງານປະຕິບັດຕ່າງໆເຊັ່ນ:
  ການຂຽນຂໍ້ຄວາມທີ່ພຣະເຈົ້າໄດ້ໃຫ້ກັບເຢເຣມີຢາແລະຫຼັງຈາກນັ້ນອ່ານໃຫ້ພວກເຂົາຟັງ.

## ບາລາອາມ

### ຂໍ້ເທັດຈິງ

ບາລາອາມເປັນຜູ້ ທຳ ນວາຍນອກຮີດເຊິ່ງກະສັດ ອາຣາບີກ ໄດ້ຈ້າງເພື່ອສາບແຊ່ງຊາວຍິດສະລາເອນໃນຂະນະທີ່ພວກເຂົາຕັ້ງຄ້າຍພັກຢູ່ແມ່ນ ້ ຳ ຈໍແດນທາງພາກ ເໜືອ ຂອງໂມອັບ, ກະກຽມເຂົ້າໄປໃນແຜ່ນດິນການາອານ.

- ບາລາອາມມາຈາກເມືອງເປເທີເຊິ່ງຕັ້ງຢູ່ໃນບໍລິເວນອ້ອມຮອບແມ່ນ ້ ຳ ເຊິ່ງຫ່າງຈາກແຜ່ນດິນໂມອາບ.ປະມານ400ໄມ
- ກະສັດມີເດຍຄົນໜຶ່ງຊື່ວ່າ ເບເລັກ ມີຄວາມຢ້ານກົວຕໍ່ ກຳ ລັງແລະ ຈຳນວນຂອງຊາວອິດສະລາເອນ,
  ດັ່ງນັ້ນລາວຈຶ່ງໄດ້ຈ້າງບາລາອາມມາສາບແຊ່ງພວກເຂົາ.
- ໃນຂະນະທີ່ບາລາອາມ ກຳລັງເດີນທາງໄປສູ່ອິດສະຣາເອນ,
  ທູດຂອງພຣະເຈົ້າໄດ້ຢືນຢູ່ໃນເສັ້ນທາງຂອງລາວເພື່ອໃຫ້ລາຂອງບາລາອາມເຊົາໄປ.
  ພຣະເຈົ້າຍັງໃຫ້ລາມີຄວາມສາມາດໃນການເວົ້າກັບບາລາອາມ.
- ພຣະເຈົ້າບໍ່ຍອມໃຫ້ບາລາອາມສາບແຊ່ງຊາວອິດສະລາເອນແລະສັ່ງໃຫ້ລາວອວຍພອນພວກເຂົາແທນ.
- ຕໍ່ມາເຖິງຢ່າງໃດກໍ່ຕາມ,
  ບາລາອາມຍັງໄດ້ນຳເອົາຄວາມຊົ່ວຮ້າຍມາສູ່ຊາວອິດສະລາເອນເມື່ອລາວມີອິດທິພົນໃຫ້ພວກເຂົານະມັດສະການພະບາອານເປັນພະປອມ.

## ບາອາຊາ

### ຂໍ້ເທັດຈິງ

ບາອາຊາເປັນຜູ້ຫນຶ່ງໃນພວກກະສັດທີ່ຊົ່ວຮ້າຍຂອງອິດສະຣາເອນ, ເປັນຜູ້ທີ່ນຳພາຄົນອິດສະຣາເອນໃຫ້ໄປນະມັດສະການຮູບເຄົາລົບທັ ງ ຫລາຍ.

- ບາອາຊາເປັນກະສັດອົງທີສາມຂອງອິດສະຣາເອນ ແລະໄດ້ປົກຄອງເປັນເວລາຊາວປີ, ໃນຊ່ວງເວລາທີ່ອາສາເປັນກະສັດຂອງຢູດາ.
- ທ່ານເປັນຜູ້ບັນຊາການທະຫານທີ່ໄດ້ກາຍເປັນກະສັດໂດຍການຂ້າກະສັດອົງກ່ອນຄື ນາດາບ.
- ໃນສມັຍຂອງບາອາຊາໄດ້ມີສົງຄາມລະຫວ່າງອສຣາເອັນແລະຢູດາ, ໂດຍສເພາະກັບກະສັດອາສາແຫ່ງຢູດາ.
- ເພາະຄວາມບາບຢ່າງຫລວງຫລາຍຂອງບາອາຊາ ໃນທີ່ສຸດພຣະເຈົ້າກໍ່ປົດເຂົາອອກຈາກຕຳແໜ່ງໂດຍຄວາມຕາຍຂອງເຂົາ.

(ເບິ່ງເພີ່ມເຕີມ: : Asa, false god)


generated on Thu Jul 10 08:45:04 2025

## ບາເບນ

### ຂໍ້ເທັດຈິງ

ບາເບນເປັນເມືອງສຳຄັນເມືອງຫນຶ່ງຂອງເຂດທີ່ເອີ້ນວ່າຊີນາ ຊຶ່ງຕັ້ງຢູ່ໃນພາກໃຕ້ຂອງເມໂສໂປເຕເມຽ. ໃນຄາວຕໍ່ມາເມືອງຊີນາໄດ້ປ່ຽນຊື່ເປັນບາ ບີໂລນ.

- ເມືອງບາເບນໄດ້ຖືກສ້າງໂດຍຫລານຊາຍຂອງຮາມທີ່ຊື່ ນິມໂຣດຊຶ່ງເປັນຜູ້ປົກຄອງດິນແດນຊິນາ.
- ຊາວເມືອງຊິນາໄດ້ເລີ່ມອວດໂຕແລະຕັດສິນໃຈຈະສ້າງຫໍຄອຍສູງຫຽມຟ້າ. ພາຍຫລັງເປັນທີ່ຮູ້ຈັກກັນວ່າ "ຫໍບາເບນ."
- ເພາະປະຊາຊົນທີ່ສ້າງຫໍຄອຍບໍ່ຕ້ອງການກະຈາຍອອກໄປຕາມທີ່ພຣະເຈົ້າຊົງໄດ້ບັນຊາໄວ້, ພຣະອົງຈຶ່ງເຮັດໃຫ້ພາສາຂອງພວກເຂົາ ວຸ່ນວາຍໄປ ຈົນພວກເຂົາບໍ່ສາມາດເຂົ້າໃຈກັນ. ສິ່ງນີ້ໄດ້ບັ່ງຄັບພວກເຂົາໃຫ້ຍ້າຍອອກໄປອາໄສຕາມບ່ອນຕ່າງໆທົ່ວໂລກ.
- ກົກເດົ້າຂອງຄຳວ່າ "ບາເບນ" ຄື "ຄວາມວຸ້ນວາຍ" ຊຶ່ງໄດ້ຖືກເອີ້ນແບບນີ້ເມື່ອພຣະເຈົ້າໄດ້ຊົງເຮັດໃຫ້ພາສາຂອງພວກເຂົາວຸ້ນວາຍໄປ.

(ເບິ່ງເພີ່ມເຕີມ: Babylon, Ham, Mesopotamia)

## ບິດເບືອນ , ຢ່າງຜິດທຳມະຊາດ , ນຳໄປໃນທາງທີ່ຜິດ

### ນິຍາມ

ຄຳວ່າ "ບິດເບືອນ" ໃຊ້ເພື່ອອະທິບາຍບຸກຄົນຫລືການກະທຳທີ່ເຮັດຜິດທາງສິນລະທຳ ຄຳວ່າ "ຢ່າງຜິດທຳມະຊາດ" ໝາຍເຖິງ "ລັກສະນະການກະທຳທີ່ຜິດຈາກທຳມະຊາດ" "ນຳໄປໃນທາງທີ່ຜິດ" ໝາຍເຖິງການບິດເບືອນຫລືການເຮັດໃຫ້ຜິດໄປຈາກສິ່ງທີ່ດີຫລືຖືກຕ້ອງ

- ບາງຄົນຫລືບາງສິ່ງທີ່ບິດເບືອນໄປຄືການບ່ຽງເອນອອກໄປຈາກທາງທີ່ດີຫລືຖືກຕ້ອງ
- ໃນພຣະຄຳພີນັ້ນ ຊາວອີດສະລາເອນໄດ້ກະທຳຢ່າງຜິດທຳມະຊາດເມື່ອພວກທ່ານບໍ່ເຊື່ອຟັງພຣະເຈົ້າ ພວກ ເຂົາມັກຈະໄປນະມັດການພະທຽມເທັດຫລາຍເທື່ອ
- ການກະທຳທີ່ຂັດຕໍ່ມາດຕະຖານຂອງພຣະເຈົ້າຫລືພຶດຕິກຳ ເອີ້ນໄດ້ວ່າການກະທຳນັ້ນເປັນການກະທຳທີ່ບິດເບືອນ
- ການແປຄຳວ່າ "ບິດເບືອນ" ສາມາດເວົ້າທັ້ງໝົດ "ມີສິນລະທຳທີ່ບິດບ່ຽວໄປ" ຫລື "ຜິດສິນລະທຳ" ຫລື "ອອກຫ່າງຈາກທາງທີ່ຫ່ຽງ ຫຼ່ຽງຂອງພະເຈົ້າ" ຂຶ້ນກັບກໍລະນີ
- "ຄຳເວົ້າບິດເບືອນ" ສາມາດແປໄດ້ອີກຢ່າງວ່າ "ເວົ້າໃນທາງຊົ່ວຮ້າຍ" ຫລື "ການເວົ້າຫລອກລວງ" ຫລື "ການເວົ້າທີ່ຜິດສິນລະທຳ"
- "ຄົນບິດເບືອນ" ສາມາດອະທິບາຍວ່າ "ຄົນທີ່ບໍ່ມີສິນລະທຳ" ຫລື "ຄົນທີ່ມີສິນລະທຳທີ່ບິດບ່ຽວໄປ" ຫລື "ຄົນທີ່ບໍ່ເຊື່ອຟັງພຣະເຈົ້າຢ່າງຕໍ່ເນື່ອງ"
- ຄຳທີ່ວ່າ "ກະທຳຢ່າງບິດເບືອນ" ສາມາດແປໄດ້ອີກຢ່າງໜຶ່ງວ່າ "ຜິດຕິກຳໃນທາງຊົ່ວຮ້າຍ" ຫລື "ກະທຳສິ່ງທີ່ຂັດຕໍ່ພຣະບັນຊາຂອງພຣະເຈົ້າ" ຫລື "ດຳເນີນຊີວິດທີ່ປະຕິເສດຄຳສອນຂອງພຣະເຈົ້າ"
- ຄຳວ່າ "ບິດເບືອນ" ສາມາດແປໄດ້ອີກຢ່າງໜຶ່ງວ່າ "ເປັນເຫດໃຫ້ເກີດຄວາມເສື່ອມເສຍ" ຫລື "ການເປັນບາງສິ່ງທີ່ຊົ່ວຮ້າຍ"

## ບຸກຄົນຫຼືສິ່ງຂອງທີ່ທຳໃຫ້ປະຫລາດໃຈ ,ສິ່ງທີ່ທຳໃຫ້ປະຫລາດໃຈ, ປະຫລາດໃຈ, ທຳໃຫ້ປະຫລາດໃຈ, ທຳໃຫ້ຕົກໃຈ.

### ນິຍາມ

ຄຳທັງໝົດເວົ້າເຖິງສິ່ງທີ່ທຳໃຫ້ປະຫລາດໃຈເພາະວ່າບາງສິ່ງທີ່ພິເສດທີ່ເກີດຂຶ້ນ.

- ບາງຄຳເຫລົ່ານີ້ແປມາຈາກພາສາກຣີກທີ່ແສດງອອກເຖິງຕາມໝາຍວ່າ"ຖືກຈູ່ໂຈມດ້ວຍຄວາມຕົກໃຈ" ຫຼື "ການຍືນຂ້າງນອກຂອງ (ຕົວເອງ)" ການສະແດງອອກເຫລົ່ານີ ສະແດງເຖິງວ່າປະຫລາດໃຈຫລາຍເທົ່າໃດ ຫຼື ທຳໃຫ້ບຸກຄົນຕົກໃຈໃນແບບເປັນຄວາມຮູ້ສຶກ ພາສາອື່ນໆອາດສະແດງອອກທີ່ຈະສະແດງຢ່າງນີ.
- ປົກກະຕິແລ້ວເຫດການນັ້ນທຳໃຫ້ຮູ້ສຶກປະຫລາດໃຈແລະຕົກໃຈຫລາຍຄືການອັດສະຈັນ, ບາງສິ່ງທີ່ພຣະເຈົ້າຊົງທຳ.
- ຄວາມໝາຍຂອງຄຳເຫລົ່ານີ້ສາມາດລວມໄປເຖິງຄວາມຮູ້ສຶກຂັດແຍ້ງເພາະວ່າສິ່ງທີ່ໄດ້ເກີດຂຶ້ນເປັນສິ່ງທີ່ບໍ່ຄາດຄິດເລີຍ.
- ອີກຫລາຍໆທາງທີ່ຈະແປຄຳເຫລົ່ານີ້ສາມາດແປໄດ້ວ່າ"ປະຫລາດໃຈຢ່າງສຸດໆ" ຫຼື "ຕື່ນຕົກໃຈຫລາຍໆ "
- ຄຳຕ່າງໆທີ່ກ່ຽວຂ້ອງ: "ສິ່ງທີ່ທຳໃຫ້ປະຫລາດໃຈ" (ຄວາມຕົກໃຈ, ຄວາມປະຫລາດໃຈ) "ຄວາມຕົກໃຈ" ແລະ "ຄວາມປະຫລາດໃຈ"
- ໂດຍທົ່ວໄປຄຳເຫລົ່ານີ້ໃຊ້ໃນທາງບວກ ແລະສະແດງວ່າປະຊາຊົນມີຄວາມສຸກກ່ຽວກັບສິ່ງທີ່ເກີດຂຶ້ນ.


generated on Thu Jul 10 08:45:04 2025

## ບຸດ, ບຸດຂອງ, ລູກຊາຍ

### ນິຍາມ

ຄຳວ່າ "ບຸດ" ອ້າງເຖິງເດັກຜູ້ຊາຍຫລືຜູ້ຊາຍທີ່ມີຄວາມສຳພັນກັບພໍ່ແມ່ຂອງເຂົາ. ແລະຍັງອ້າງເຖິງເຊື້ອສາຍຂອງໃຜຫລາຍຄົນ ຫລືລູກບຸນທຳ.

- ຄຳວ່າ "ບຸດ" ມັກໃຊ້ເປັນຄຳປຽບທຽບໃນພຣະຄຳພີທີ່ອ້າງເຖິງຜູ້ສືບເຊື້ອສາຍທີ່ເປັນຜູ້ຊາຍ, ຢ່າງເຊັ່ນຫລານຊາຍຫລືເຫລນຊາຍ.
- ຄຳວ່າ "ບຸດ" ສາມາດໃຊ້ເປັນຮູບແບບທີ່ສຸພາບໃນການເອີ້ນເດັກຜູ້ຊາຍຫລືຜູ້ຊາຍທີ່ມີອາຍຸນ້ອຍກວ່າ.
- ບາງຄັ້ງຄຳວ່າ "ບັນດາບຸດຂອງພຣະເຈົ້າ" ຖືກໃຊ້ໃນພັນທະສັນຍາໃໝ່ທີ່ໝາຍເຖິງເຫລົ່າຜູ້ເຊື່ອໃນພຣະເຢຊູຄຣິດ.
- ພຣະເຈົ້າຊົງເອີ້ນຊົນຊາດອິດສະຣາເອນວ່າ "ລູກຫົວປີ." ຂອງພຣະອົງ
  ນີ້ອ້າງເຖິງຊົນຊາດພຣະເຈົ້າຊົງຄັດເລືອກໄວ້ໃຫ້ເປັນປະຊາກອນພິເສດຂອງພຣະອົງ.
  ໂດຍຜ່ານທາງພວກເຂົາພຣະຄຳຂອງພຣະເຈົ້າແຜ່ງການຊົງໄຖ່ແລະການຊົງຊ່ວຍກູ້ໂດຍໄດ້ມາເຖິ,ງ
  ຊຶ່ງເປັນຜົນໃຫ້ຫລາຍຄົນໄດ້ມາເປັນບຸດທາງຝ່າຍວິນຍານຂອງພຣະອົງ.
- ປະໂຫຍກທີ່ວ່າ "ບຸດຂອງ" ມັກມີຄຳອຸປະມາທີ່ໝາຍເຖິງ, "ມີລັກສະນະຂອງ" ຕົວຢ່າງເຊັ່ນ "ບຸດຂອງຄວາມສະຫວ່າງ."
  "ບຸດຂອງຄວາມບໍ່ເຊື່ອຟັງ," "ບຸດແຫ່ງສັນຕິສຸກ,"ແລະ "ບຸດແຫ່ງຝ່າຮ້ອງ."
- ປະໂຫຍກທີ່ວ່າ "ບຸດຂອງ" ຍັງໃຊ້ເພື່ອບອກວ່າໃຜເປັນພໍ່ຂອງໃຜ. ປະໂຫຍກນີ້ຍັງໃຊ້ໃນລຳດັບວົງຕະກູນແລະທີ່ອື່ນໆ ອີກຫລາຍທີ.
- ການໃຊ້ "ບຸດຂອງ" ເພື່ອຊ່ວຍໃຫ້ຊື່ພໍ່ຊ່ວຍແຍກແຍະປະຊາຊົນທີ່ມີຊື່ຄືກັນ ຕົວຢ່າງເຊັ່ນ, "ເອຊາຢາ, ບຸດແຫ່ງສາໂດກ" ແລະ
  "ເອລີຢາ, ບຸດແຫ່ງນາທັນ" ໃນ 1 ກະສັດ ບົດທີ 4, ແລະ "ເອຊາຢາ, ບຸດແຫ່ງອະມາຊີ ໃນ 2 ກະສັດ ບົດທີ 15
  ຜູ້ຊາຍທີ່ຊື່ດຽວກັນສາມຄົນ."

### ຄຳແນະນຳໃນການແປ

- ໃນສິ່ງທີ່ປະກົດຂອງຄຳນີ, ເປັນການດີທີ່ສຸດທີ່ຈະແປ "ບຸດ" ໂດຍໃຊ້ຄຳຕົ່ງຕົ່ວໃນພາສາທີ່ໃຊ້ອ້າງເຖິງບຸດ.
- ເມື່ອແປຄຳວ່າ "ພຣະບຸດຂອງພຣະເຈົ້າ," ຄວນໃຊ້ຄຳທຳມະດາໃນພາສາເປົ້າໝາຍທີ່ຈະແປຄຳວ່າ "ບຸດ"
- ເມື່ອໄດ້ໃຊ້ອ້າງອີງເຖິງຜູ້ສືບເຊື້ອສາຍຫລາຍວ່າບຸດຊາຍ, ໂດຍກົງກວ່າ "ເຊື້ອສາຍ" ຄວນຈະນຳມາໃຊ້ ,
  ທີ່ອ້າງອີງເຖິງພຣະເຢຊູໃນຖານະ "ຜູ້ສືບເຊື້ອສາຍຂອງດາວິດ" ຫລືໃນການສືບວົງຕະກູນບາງເທື່ອ "ບຸດຊາຍ"
  ອ້າງອີງຜູ້ສືບເຊື້ອສາຍທີ່ເປັນຜູ້ຊາຍ ບໍ່ໄດ້ໝາຍເຖິງບຸດຊາຍແທ້ ໆ.
- ບາງເທື່ອ "ພວກບຸດຊາຍ" ສາມາດແປວ່າ "ລູກຫລານ," ເມື່ອມີທັ້ງຜູ້ຊາຍແລະຜູ້ຍິງໄດ້ຮັບການອ້າງເຖິງ ຕົວຢ່າງເຊັ່ນ,
  "ພວກບຸດຊາຍຂອງພຣະເຈົ້າ" ສາມາດແປວ່າ "ລູກຫລານຂອງພຣະເຈົ້າ" ເນື່ອງຈາກຄຳກ່າວນີ້ທັ້ງໝົດທັ້ງຜູ້ຍິງແລະຜູ້ຊາຍດ້ວຍ.
- ຄຳກ່າວປຽບທຽບ "ບຸດຂອງ" ສາມາດແປວ່າ "ບາງຄົນຜູ້ມີບຸກຄະລິກລັກສະນະຂອງ" ຫລື "ບາງຄົນຜູ້ທີ່ເໝືອນ" ຫລື "ບາງຄົນຜູ້ທີ່ມີ" ຫລື"ບາງຄົນຜູ້ທີ່ກະທຳເໝືອນ."

## ບຸດມະນຸດ, ບຸດມະນຸດ

### ນິຍາມ

ຄຳວ່າ, "ບຸດມະນຸດ" ຈະໃຊ້ເອີ້ນພຣະເຢຊູຊຶ່ງໝາຍເຖິງຕົວຂອງພຣະອົງເອງ ພຣະອົງມັກໃຊ້ຄຳນີ້ເພື່ອແທນການເອີ້ນວ່າ "ເຮົາ" ຫລື "ຕົວເຮົາ."

- ໃນພຣະຄຳພີ, "ບຸດມະນຸດ" ສາມາດເປັນວິທີໃນການອ້າງເຖິງໝາຍເຖິງຫລືກ່າວເຖິງຊາຍຄົນໜຶ່ງ. ແລະຍັງໝາຍເຖິງ "ມະນຸດ."
- ຕະຫລອດພຣະຄຳພີເດີມໃນພຣະຄຳເອເຊກຽນ, ຫລາຍເທື່ອພຣະເຈົ້າມັກເວົ້າເຖິງເອເຊກຽນວ່າ "ບຸດມະນຸດ." ຕົວຢ່າງເຊັ່ນ
  ພຣະອົງກ່າວວ່າ, "ເຈົ້າ ບຸດມະນຸດ ຈະຕ້ອງປະກາດພຣະຄຳ."
- ຜູ້ປະກາດພຣະຄຳດານີເອນໄດ້ເຫັນນິມິດຂອງ "ບຸດມະນຸດ" ມາດ້ວຍກ້ອນເມກຊຶ່ງເລັ່ງເຖິງການສະເດັດມາຂອງພຣະເມຊີອາ
- ພຣະເຢຊູໄດ້ກ່າວວ່າບຸດມະນຸດຈະສະເດັດກັບມາໃນມື້ໜຶ່ງເທິງກ້ອນເມກທັ້ງຫລາຍ.
- ນີ້ອ້າງອີງເຖິງບຸດມະນຸດສະເດັດມາໃນກ້ອນເມກປາກົດເປີດເຜີຍໃຫ້ເຫັນວ່າພຣະເຢຊູ ພຣະເມຊີອາ

ຊຶ່ງເປັນພຣະເຈົ້າ.

### ເບິ່ງເພີ່ມຕື່ມ

- ເມື່ອພຣະເຢຊູຊົງໃຊ້ຄຳວ່າ "ບຸດມະນຸດ," ນີ້ສາມາດແປວ່າ, "ທ່ານຜູ້ທີ່ໄດ້ກາຍເປັນມະນຸດ" ຫລື "ຜູ້ຊາຍຈາກສະຫວັນ."
- ຜູ້ແປບາງຄົນຈະຮ່ວມເອົາຄຳວ່າ "ເຮົາ" ຫລື "ຕົວເຮົາ" ໃນຕຳແໜ່ງນີ້ດ້ວຍ

## ບຸດຫົວປີ

### ນິຍາມ

ຄຳວ່າ "ບຸດຫົວປີ" ກ່າວເຖິງການຖວາຍຄົນ ຫຼືສັດທີ່ເກີດມາເປັນບຸດຫົວປີ, ກ່ອນທີ່ບຸດຄົນໆ ອື່ນໆຈະເກີດ ປົກກະຕິຄືບຸດຫົວປີ.

- ໃນພຣະຄັມພີ "ບຸດຫົວປີ" ມັກກ່າວເຖິງບຸດຊາຍຄົນທຳອິດທີ່ເກີດອອກມາ.
- ໃນລະຍະເວລາພຣະຄັມພີ,
  ບຸດຊາຍຫົວປີຈະໄດ້ຮັບຄວາມສຳຄັນແລະມໍຣະດົກທີ່ເຂົ້າຈະໄດ້ຮັບຈາກຄອບຄົວນັ້ນຫຼາຍກ່ວາບຸດຊາຍຄົນອື່ນເຖິງສອງເທົ່າ.
- ຫຼາຍໆຄັ້ງຈະເປັນສັດຕົວຜູ້ຫົວປີທີ່ຖືກໃຊ້ເປັນເຄື່ອງຖວາຍບູຊາແກ່ພຣະເຈົ້າ.
- ແນວຄິດນີ້ສາມາດໃຊ້ຢ່າງປຽບທຽບໄດ້
  ຕົວຢ່າງເຊັ່ນຊົນຊາດອິສະຣາເອນຖືກຮຽກວ່າເປັນບຸດຊາຍຫົວປີຂອງພຣະເຈົ້າເພາະວ່າພຣະເຈົ້າຊົງໄດ້ໃຫ້ສິດທິພິເສດເໜືອຊົນຊາດອື່ນ.
- ພຣະເຢຊູ,
  ພຣະບຸດຂອງພຣະເຈົ້າຖືກຮຽກວ່າເປັນບຸດຫົວປີຂອງພຣະເຈົ້າເພາະຄວາມສຳຄັນຂອງພຣະອົງແລະສິດທິອຳນາດທີ່ເໜືອກ່ວາໃຜທັ້ງປວງ.

### ຄຳແນະນຳການແປ

- ເມື່ອ "ບຸດຫົວປີ" ເກີດຂຶ້ນໃນຂໍ້ນັ້ນພຽງຄຳດຽວ, ຄຳນີ້ສາມາດແປໄດ້ວ່າ "ຜູ້ຊາຍທີ່ເກີດຄົນທຳອິດ," ຫຼື "ບຸດຊາຍຫົວປີ"
  ຊຶ່ງເປັນຄວາມໃນຂອງຄຳນີ້.

## ບ່ອນຝັງສົບ,ຫລຸມຝັງສົບ,ສຸສານຝັງສົບ

### ນິຍາມ

ຄຳວ່າ "ບ່ອນຝັງສົບ" ແລະ "ຫລຸມຝັງສົບ" ໝາຍເຖິງສະຖານທີ່ທີ່ຜູ້ຄົນນຳຮ່າງຂອງບຸກຄົນທີ່ເສຍຊີວິດໄປຝັງ. "ສຸສານຝັງສົບ"
ເປັນຄຳທົ່ວໄປຫລາຍກ່ວາທີ່ໝາຍເຖິງບ່ອນຝັງສົບນີ້ດ້ວຍ.

- ຊາວຢິວບາງເທື່ອໃຊ້ຖ້ຳທຳມະຊາດເປັນບ່ອນຝັງສົບ,ແລະບາງເທື່ອກໍຂຸດຖ້ຳໄວ້ໃນຫີນທີ່ດ້ານຂ້າງຂອງໂນນພູ.
- ໃນສະໄໝພຣະຄຳພີໃໝ່, ມັນເປັນເລື່ອງທຳມະດາທີ່ຈະກີ້ງກ້ອນຫີນໃຫຍ່ກ້ອນໜຶ່ງຢູ່ທາງໜ້າຂອງການເປີດບ່ອນຝັງສົບເພື່ອຈະປິດມັນ.
- ຖ້າຄຳເວົ້າສຳລັບບ່ອນຝັງສົບຫລືຫລຸມຝັງສົບສາມາດອ້າງເຖິງຫລຸມທີ່ຮ່າງກາຍໄດ້ວາງຢູ່ໃຕ້ພື້ນດິນແລ້ວ,
  ກໍມີວິທີອື່ນໃນການແປອາດລວມເຖິງ, "ຖ້ຳ" ຫລື "ຫລຸມໃນດ້ານຂ້າງຂອງໂນນພູ."
- ປະໂຫຍກທີ່ວ່າ "ຫລຸມຝັງສົບ"
  ມັກໃຊ້ໂດຍທົ່ວໄປແລະເປັນທຳນອງປຽບທຽບເພື່ອອ້າງເຖິງສະພາບຂອງການຕາຍຫລືສະຖານທີ່ທີ່ດວງວິນຍານທັ້ງຫລາຍຂອງຄົນຕາຍຢູ່.

## ບ້ວງ, ກັບດັກ

### ນິຍາມ

ຄຳວ່າ "ບ້ວງ" ແລະ "ກັບດັກ" ໝາຍເຖິງເຄື່ອງມືທີ່ໃຊ້ໃນການຈັບສັດແລະຂັງສັດຈາກການໜີ
ໃນພຣະຄຳພີຄຳເຫລົ່ານີ້ໃຊ້ເຊິ່ງປຽບທຽບໃນການເວົ້າເຖິງຄວາມຍາກແລະການທົດລອງທີ່ເໝືອນກັບບ້ວງທີ່ຖືກເຊື່ອງໄວ້ຄອຍຈັບຄົນແລະທຳຮ້າຍພວກເຂົາ.

- "ບ້ວງ" ຈະມີບ້ວງເຊືອກຫລືສາຍທີ່ຈະຮັດແໜ້ນຢ່າງກະທັນຫັນເມື່ອສັດຍ່າງເຂົ້າມາໃນບ້ວງ ຂາຂອງມັນກໍຈະຕິດກັບບ້ວງນັ້ນ.
- ໂດຍປົກກະຕິແລ້ວ"ກັບດັກ" ຈະເຮັດມາຈາກໂລຫະຫລືໄມ້ແລະມີສອງສ່ວນທີ່ຈະຮັດຢ່າງກະທັນຫັນແລະມີພະລັງເພື່ອຈະຈັບສັດ
  ດັ່ງນັ້ນມັນຈຶ່ງບໍ່ສາມາດໜີໄປໄດ້ ບາງເທື່ອກັບດັກຍັງເຮັດເປັນຂຸມເລິກເພື່ອທີ່ຈະໃຫ້ບາງສິ່ງຕົກເຂົ້າມາໃນກັບດັກນັ້ນ.
- ໂດຍປົກກະຕິບ້ວງຫລືກັບດັກຈະຖືກເຊື່ງໄວ້ ດັ່ງນັ້ນເຫຍື່ອຈະຖືກເອົາໄປໂດຍທີ່ບໍ່ໄດ້ຕັ້ງຕົວເລີຍ.
- ປະໂຫຍກທີ່ວ່າ "ວາງກັບດັກ" ໝາຍເຖິງການຕຽມຄວາມພ້ອມຂອງກັບດັກເພື່ອຈັບບາງສິ່ງບາງຢ່າງ.
- ການ"ຕົກເຂົ້າໄປໃນກັບດັກ" ໝາຍເຖິງການຕົກເຂົ້າໄປໃນຂຸມເລິກຫລືຫລຸມພາງທີ່ຖືກຂຸດແລະເຊື່ອງໄວ້ເພື່ອຈັບສັດ.
- ເມື່ອໃຊ້ການປຽບທຽບ ການຖືກຈັບໃນກັບດັກຫລືບ້ວງຈະປຽບທຽບກັບການທີ່ບຸກຄົນຖືກເຮັດໃຫ້ຕິດກັບ
  ໃນຄວາມຍາກເຊັ່ນດຽວກັບທີ່ສັດຖືກຈັບໂດຍບ້ວງຫລືກັບດັກນັ້ນ.
- ເຊັ່ນດຽວກັບສັດທີ່ຢູ່ໃນອັນຕະລາຍແລະບາດເຈັບເພາະການຕິດຢູ່ໃນກັບດັກ
  ດັ່ງນັ້ນບຸກຄົນທີ່ຕົກລົງໄປໃນກັບດັກຂອງຄວາມຍາກກໍກຳລັງຖືກເຮັດຮ້າຍໂດຍຄວາມຍາກນັ້ນແລະຕ້ອງການ
  ການທີ່ຈະຖືກປ່ອຍຈາກຍາກນັ້ນ.


generated on Thu Jul 10 08:45:04 2025

## ບໍລິສຸດ, ຄວາມບໍລິສຸດ

### ນິຍາມ

ຄຳວ່າ "ບໍລິສຸດ" ແລະ "ຄວາມບໍລິສຸດ"
ອ້າງເຖິງພຣະລັກສະນະຂອງພຣະເຈົ້າທີ່ແຍກອອກມາໂດຍສິ້ນເຊີງແລະແຍກຈາກທຸກສິ່ງທີ່ເປັນຄວາມບາບແລະບໍ່ສົມບູນແບບ.

- ພຣະເຈົ້າເທົ່ານັ້ນທີ່ຊົງບໍລິສຸດໂດຍສິ້ນເຊີງ. ພຣະອົງຊົງກະທຳໃຫ້ຄົນແລະສິ່ງຕ່າງໆ ບໍລິສຸດ.
- ບຸກຄົນທີ່ບໍລິສຸດເປັນຂອງພຣະເຈົ້າແລະໄດ້ຮັບການແຍກໄວ້ເພື່ອເປົ້າໝາຍໃນການຮັບໃຊ້ພຣະເຈົ້າແລະນຳພຣະສີຣິມາສູ່ພຣະອົງ.
- ສິ່ງທີ່ພຣະເຈົ້າໄດ້ຊົງປະກາດໃຫ້ບໍລິສຸດຄືສິ່ງທີ່ພຣະອົງໄດ້ຊົງແຍກໄວ້ເພື່ອພຣະສີຣິຂອງພຣະອົງແລະໃຫ້ພຣະອົງໃຊ້ໄດ້,
  ເຊັ່ນແທ່ນບູຊາທີ່ມີໄວ້ເພື່ອຖວາຍເຄື່ອງບູຊາແດ່ພຣະອົງ.
- ເນື່ອງຈາກພຣະເຈົ້າຊົງບໍລິສຸດ, ຄົນບໍ່ສາມາດເຂົ້າໃກ້ພຣະອົງໄດ້ເວັ້ນເສຍແຕ່ວ່າພຣະອົງຊົງອະນຸຍາດໃຫ້ທ່ານເຂົ້າໃກ້ໄດ້,
  ເພາະພວກທ່ານເປັນພຽງມະນຸດ, ມີຄວາມບາບແລະບໍ່ສົມບູນແບບ.
- ໃນພັນທະສັນຍາເດີມ, ພຣະເຈົ້າຊົງແຍກປະໂລຫິດໄວ້ໃຫ້ບໍລິສຸດເພື່ອຮັບໃຊ້ພຣະອົງເປັນການພິເສດ.
  ພວກເຂົາຕ້ອງຜ່ານພິທີການຊຳລະໃຫ້ສະອາດຈາກຄວາມບາບເພື່ອທີ່ຈະເຂົ້າໃກ້ພຣະເຈົ້າ.
- ພຣະເຈົ້າຍັງຊົງແຍກສະຖານທີ່ບາງແຫ່ງແລະສິ່ງຂອງບາງຢ່າງທີ່ເປັນຂອງພຣະອົງ ຫລືເປັນທີ່ທີ່ພຣະອົງຊົງສຳແດງພຣະອົງ,
  ເຊັ່ນພຣະວິຫານຂອງພຣະອົງ.

### ຄຳແນະນຳໃນການແປ

- ວິທີການທີ່ຈະແປ "ບໍລິສຸດ" ອາດລວມເຖິງ, "ແຍກໄວ້ສຳລັບພຣະເຈົ້າ" ຫລື "ເປັນຂອງພຣະເຈົ້າ" ຫລື "ບໍລິສຸດຢ່າງສິ້ນເຊີງ" ຫລື
  "ປະສະຈາກຄວາມບາບໂດຍສິ້ນເຊີງ" ຫລື "ແຍກຈາກຄວາມບາບ."
- ການ "ເຮັດໃຫ້ບໍລິສຸດ" ມັກຈະໄດ້ຮັບການແປວ່າ "ຊຳລະໃຫ້ບໍລິສຸດ" ໃນພາສາອັງກິດ. ແລະອາດຈະແປໄດ້ວ່າ "ແຍກໄວ້"

## ບໍລິສຸດ, ຊຳຮະໃຫ້ບໍລິສຸດ, ການບໍ່ມີຕຳໜິ

### ນິຍາມ

"ບໍລິສຸດ" ໝາຍເຖິງການບໍ່ມີຕຳໜິຫລືບໍ່ມີຫຍັງປະສົມໃນສິ່ງທີ່ບໍ່ຄວນຈະຢູ່ບ່ອນນັ້ນ
ການຊຳຮະໃຫ້ສະອາດແກ່ບາງສິ່ງບາງຢ່າງເປັນການເຮັດໃຫ້ສະອາດແລະກຳຈັດສິ່ງປົນເປື້ອນຫລືສິ່ງທີ່ເຮັດໃຫ້ເປັນມົນພິດອອກໄປ

- ໃນພັນທະສັນຍາເດີມ "ບໍລິສຸດ" ແລະ"ການຊຳຮະໃຫ້ບໍລິສຸດ"
  ອ້າງເຖິງການເຮັດໃຫ້ສະອາດຈາກສິ່ງທີ່ເຮັດໃຫ້ສິ່ງຂອງຫລືຄົນບໍ່ສະອາດຕາມພິທີກຳ ເຊັ່ນພະຍາດ ຂອງແຫລວໃນຮ່າງກາຍ
  ຫລືການເກີດລູກ
- ພັນທະສັນຍາເດີມຍັງມີກົດທີ່ບອກວິທີທີ່ເຮັດໃຫ້ປະຊາຊົນບໍລິສຸດຈາກຄວາມບາບ ໂດຍທົ່ວໄປຈະເປັນການຖວາຍສັດບູຊາ
  ນີ້ເປັນພຽງຊົ່ວຄາວແລະຕ້ອງຖວາຍເຄື່ອງບູຊາຊ້ຳອີກເທື່ອແລ້ວເທື່ອເລົ່າ
- ໃນພັນທະສັນຍາໃໝ່ການເຮັດໃຫ້ບໍລິສຸດຫລາຍເທື່ອອ້າງເຖິງການໄດ້ຮັບການຊຳຮະໃຫ້ສະອາດຈາກຄວາມບາບ
- ທາງດຽວທີ່ຜູ້ຄົນຈະສາມາດເຮັດໃຫ້ບໍລິສຸດໄດ້ຢ່າງສົມບູນແລະຢ່າງຖາວອນຈາກຄວາມບາບຄືຜ່ານການກັບໃຈໃໝ່ແລະການຮັບເອົາການອະໄພໂທດຈາ

### ຄຳແນະນຳໃນການແປ

- ຄຳວ່າ "ຊຳຮະໃຫ້ບໍລິສຸດ" ສາມາດແປວ່າ "ເຮັດໃຫ້ບໍລິສຸດ" ຫລື "ເຮັດໃຫ້ໃສສະອາດ" ຫລື "ເຮັດໃຫ້ສະອາດຈາກສິ່ງປົນເປື້ອນ"
  ຫລື "ກຳຈັດຄວາມບາບທັ້ງສິ້ນ"
- ຄຳວ່າ , "ເມື່ອການເຮັດໃຫ້ບໍລິສຸດສຳເລັດສິ້ນໄປ" ສາມາດແປວ່າ
  "ເມື່ອພວກທ່ານໄດ້ເຮັດໃຫ້ພວກທ່ານສະອາດບໍລິສຸດໂດຍການຕາມວັນທີ່ກຳນົດໄວ້"
- ຄຳວ່າ " ຈັດຕຽມການເຮັດໃຫ້ບໍລິສຸດຈາກບາບ" ສາມາດແປວ່າ
  "ຈັດຕຽມວິທີສຳລັບປະຊາຊົນໃຫ້ສະອາດຢ່າງສົມບູນຈາກຄວາມບາບຂອງພວກເຂົາ"
- ວິທີອື່ນທີ່ແປ "ການຊຳຮະໃຫ້ບໍລິສຸດ" ສາມາດລວມທັ້ງ "ການເຮັດໃຫ້ສະອາດ" ຫລື "ການຊຳຮະລ້າງຝ່າຍວິນຍານ" ຫລື
  "ກາຍເປັນສະອາດໂດຍພິທີກຳ"


generated on Thu Jul 10 08:45:04 2025

## ບໍ່ຍຸຕິທຳ, ຢ່າງບໍ່ຍຸຕິທຳ, ຄວາມບໍ່ຍຸຕິທຳ

### ນິຍາມ

ຄຳວ່າ "ບໍ່ຍຸຕິທຳ" ແລະ "ຢ່າງບໍ່ຍຸຕິທຳ" ໝາຍ ເຖິງການປະຕິບັດຕໍ່ຄົນອື່ນຢ່າງບໍ່ຍຸຕິ, ແລະເຮັດເປັນປະຈຳ, ລັກສະນະທີ່ເປັນອັນຕະລາຍ.

- "ຄວາມບໍ່ຍຸຕິທຳ" ແມ່ນສິ່ງທີ່ບໍ່ດີທີ່ເຮັດກັບຍາງຄົນທີ່ບຸກຄົນນັ້ນບໍ່ສົມຄວນໄດ້ຮັບ. ໂດຍອ້າງອີງໃສ່ການປະຕິບັດຕໍ່ຄົນໂດຍບໍ່ຍຸຕິທຳ.
- ຄວາມບໍ່ຍຸຕິທຳຍັງໝາຍຄວາມວ່າຍາງຄົນໄດ້ຮັບການປະຕິບັດທີ່ບໍ່ດີ ໃນຂະນະທີ່ຄົນອື່ນໄດ້ຮັບການປະຕິບັດຢ່າງດີ.
- ຄົນທີ່ປະຕິບັດຢ່າງບໍ່ຍຸຕິທຳ ຖືກຖືວ່າເປັນ "ບາງສ່ວນ" ຫລື "ອະຄະຕິ" ເພາະວ່າພວກເຂົາບໍ່ໄດ້ປະຕິບັດຕໍ່ຄົນອື່ນຢ່າງເທົ່າທຽມກັນ.

### ຄຳແນະນຳໃນການແປ

- ຂຶ້ນກັບສະພາບການ "ບໍ່ຍຸຕິທຳ" ສາມາດແປວ່າ "ຄວາມບໍ່ເທົ່າທຽມກັນ" ຫລື "ບາງສ່ວນ" ຫລື "ບໍ່ຊອບທຳ"
- ປະໂຫຍກທີ່ວ່າ "ບໍ່ຍຸຕິທຳ" ສາມາດຖືກແປວ່າ "ຜູ້ທີ່ບໍ່ຍຸຕິທຳ" ຫລື "ຄົນທີ່ບໍ່ຊອບທຳ" ຫລື "ຄົນທີ່ປະຕິບັດຕໍ່ຄົນອື່ນຢ່າງບໍ່ຍຸຕິທຳ" ຫລື "ຄົນບໍ່ຊອບທຳ" ຫລື "ຄົນທີ່ບໍ່ເຊື່ອຟັງພຣະເຈົ້າ."
- ຄຳວ່າ "ຢ່າງບໍ່ຍຸຕິທຳ" ສາມາດແປວ່າ, "ໃນລັກສະນະບໍ່ຍຸຕິທຳ" ຫລື "ຢ່າງຜິດໆ" ຫລື "ຢ່າງບໍ່ຍຸຕິທຳ."
- ວິທີການແປ "ຄວາມບໍ່ຍຸຕິທຳ" ສາມາດປະກອບດ້ວຍ, "ການປະຕິບັດທີ່ບໍ່ຖືກຕ້ອງ" ຫລື "ການປະຕິບັດທີ່ບໍ່ຍຸຕິທຳ" ຫລື "ການກະທຳທີ່ບໍ່ຍຸຕິທຳ."

## ບໍ່ນ້ຳ, ຫຼືຖັງໃສ່ນ້ຳ

### ນິຍາມ

ຄຳວ່າ "ບໍ່ນ້ຳ" ແລະ "ຖັງໃສ່ນ້ຳ" ໝາຍເຖິງແມ່ນ້ຳສອງສາຍໃນສະໄໝພຣະຄຳພີ."

- ບໍ່ນ້ຳຄືຫຼຸມເລິກທີ່ຖືກຂຸດລົງໄປໃນພື້ນດິນເພື່ອໃຫ້ນ້ຳໄຫຼອອກມາຈາກພື້ນດິນໄດ້
- ອ່າງເກັບນ້ຳຂະໜາດໃຫຍ່ແລະເລິກທີ່ຂຸດເຂົ້າໄປໃນຫີນເພື່ອໃຊ້ເປັນບ່ອນເກັບນ້ຳຝົນໄດ້
- ອ່າງເກັບນ້ຳໂດຍປົກກະຕິຈະຂຸດລົງໄປໃນຫີນທີ່ສານດ້ວຍໄມ້ແລະເອົາຢາງມາທາບໍ່ໃຫ້ຮົ່ວເພື່ອຈະໃສ່ນ້ຳໄວ້ໄດ້ "ອ່າງແຕກ" ເມື່ອຢາງທາບໍ່ດີ ນ້ຳກໍໄຫຼອອກໄດ້.
- ອ່າງນ້ຳໂດຍປົກກະຕິຈະຕັ້ງຢູ່ໃນບໍລິເວນເດີນບ້ານຂອງປະຊາຊົນເພື່ອລໍຮັບນ້ຳຝົນທີ່ໄຫຼອອກມາຈາກຫຼັງຄາບ້ານ.
- ອ່າງນ້ຳໂດຍປົກກະຕິຈະຕັ້ງຢູ່ໃນສະຖານທີ່ໆພວກເຂົາສາມາດເຂົ້າເຖິງໄດ້ໂດຍຄອບຄົວຫຼືຊຸມຊົນທັງໝົດ.
- ເນື່ອງຈາກນ້ຳເປັນສິ່ງສຳຄັນສຳຫຼັບທັງຄົນແລະສັດມີສິດທິໃນການໃຊ້ບໍ່ນ້ຳມັກມີສານເຫດຂອງການຜິດຖຽງກັນແລະຄວາມຂັດແຍ່ງກັນ.
- ທັງບໍ່ນ້ຳແລະອ່າງເກັບນ້ຳຈະຖືກປິດດ້ວຍຫີນກ້ອນໃຫຍ່ເພື່ອປ້ອງກັນບໍ່ໃຫ້ມີສິ່ງໃດໆ ຕົກລົງໄປໃນບໍ່. ບໍ່ມັກຈະມີເຊືອກຜູກມັດກັບຖັງຫຼືຄຸເພື່ອຕັກນ້ຳຂຶ້ນມາໃຊ້.
- ບາງຄັ້ງກໍມີການໃຊ້ຖັງເກັບນ້ຳເພື່ອເປັນທີ່ຄຸມຂັງຄົນ ເຊັ່ນທີ່ເກີດຂຶ້ນກັບໂຢເຊັບແລະເຢເຣມີຢາ.

### ຄຳແນະນຳໃນການແປ

- ວິທີການແປ "ບໍ່ນ້ຳ" ອາດໝາຍເຖິງ "ຂຸມນ້ຳທີ່ເລິກ" ຫຼື "ຂຸມເລິກສຳລັບນ້ຳຝຸ" ຫຼື "ຂຸມເລິກສຳຫລັບຕັກນ້ຳຂຶ້ນມາໃຊ້. "
- ຄຳວ່າ "ອ່າງເກັບນ້ຳ" ສາມາດແປເປັນ "ຂຸມຫີນເກັບນ້ຳ" ຫຼື "ຂຸມເລິກແລະແຄບສຳລັບນ້ຳ" ຫຼື "ຖັງເກັບນ້ຳໄວ້ໃຕ້ດິນ."
- ຄຳຊັບເຫຼົ່ານີ້ມີຄວາມໝາຍຄືກັນ ຄວາມແຕ່ງກັນ ກໍຄືອ່າງນ້ຳມັກຈະໄດ້ຮັບນ້ຳຈາກຝົນດິນ ໃນຂະນະທີ່ນາໃນອ່າງເກັບນ້ຳມັກຈະເປັນອ່າງເກັບນ້ຳທີ່ມາຈາກຝົນ.

## ບໍ່ມີຕຳນິ

### ນິຍາມ

ຄຳວ່າ "ບໍ່ມີຕຳນິ" ໝາຍຄວາມວ່າແທ້ບໍ່ມີຄຳຕຳນິ. ມັນໄດ້ຖືກນຳໃຊ້ເພື່ອກ່າວເຖິງບຸກຄົນຜູ້ທີ່ເຊື່ອຟັງພະເຈົ້າຢ່າງສຸດຈິດສຸດໃຈ, ແຕ່ມັນບໍ່ໄດ້ໝາຍຄວາມວ່າຄົນນັ້ນບໍ່ມີບາບ.

- ອັບຣາຮາມແລະໂນອາຖືວ່າບໍ່ມີຄວາມຜິດຕໍ່ໜ້າພຣະເຈົ້າ.
- ບຸກຄົນຜູ້ທີ່ມີຊື່ສຽງວ່າເປັນຄົນຊອບທຳ“ ບໍ່ມີກຽດຕິຍົດ” ປະຜິດຕົນໃນແບບທີ່ໃຫ້ກຽດພຣະເຈົ້າ.
- ອີງຕາມຂໍ້ທີໜຶ່ງ, ຄົນທີ່ບໍ່ມີຄວາມຜິດແມ່ນ "ຜູ້ທີ່ຢຳເກງພຣະເຈົ້າແລະຫັນໜີຈາກຄວາມຊົ່ວ."


generated on Thu Jul 10 08:45:04 2025

### ຄໍາແນະນໍາໃນການແປ

- ນີຍັງສາມາດຖືກແປເປັນ "ໂດຍບໍ່ມີຄວາມຜິດຕໍ່ຄຸນລັກສະນະຂອງລາວ" ຫລື "ເຊື່ອຟັງພຣະເຈົ້າຢ່າງສົມບູນ" ຫລື "ຫລີກລ່ຽງບາບ" ຫຼື "ຮັກສາຕົວຈາກຄວາມຊົ່ວ."

## ບໍ່ສະອາດ

### ນິຍາມ

ຕາມຕົວອັກສອນ, ຄໍາວ່າ "ບໍ່ສະອາດ." ໝາຍຄວາມວ່າ "ບໍ່ສັກສິດ."
ອະທິບາຍເຖິງບາງຄົນຫລືບາງສິ່ງບາງຢ່າງທີ່ບໍ່ໄດ້ຖວາຍກຽດແດ່ພຣະເຈົ້າ.

- ຄໍານີ້ຖືກໃຊ້ເພື່ອອະທິບາຍເຖິງບາງຄົນທີ່ສັນລະເສີນພຣະເຈົ້າໂດຍການກະບົດຕໍ່ພຣະອົງ.
- ສິ່ງທີ່ເອີນວ່າ "ຄວາມບໍ່ສະອາດ " ສາມາດອະທິບາຍໄດ້ວ່າເປັນຄໍາຫໍ່າມະດາວ່າ,
  ຢ່າເຄົາລົບສິ່ງສັກສິດຫລືສິ່ງບໍ່ບໍລິສຸດ.ທີ່ບໍ່ແມ່ນຂອງພຣະເຈົ້າ.

### ຄໍາແນະນໍາການແປ

- ວິທີການແປ ຄໍາ ສັບນີ້ອາດປະກອບມີ, "ບໍ່ບໍລິສຸດ" ຫລື "ບໍ່ແມ່ນຂອງພຣະເຈົ້າ" ຫລື "ບໍ່ຖວາຍກຽດແກ່ພຣະເຈົ້າ" ຫລື
  "ໂດຍບໍ່ມີພຣະເຈົ້າ."
- ໃນບາງສະພາບການ, ຄໍາວ່າ "ບໍ່ບໍລິສຸດ " ສາມາດແປວ່າ "ບໍ່ສະອາດ."

## ບໍ່ສັດຊື. ຄວາມບໍ່ສັດຊື

### ນິຍາມ

ຄໍາວ່າ " ບໍ່ສັດຊື " ອະທິບາຍເຖິງຄົນທີ່ບໍ່ໄດ້ເຮັດໃນສິ່ງທີ່ພຣະເຈົ້າຊົງບັນຊາໃຫ້ເຮັດ. ເງື່ອນໄຂຫລືການປະຕິບັດໃນການບໍ່ສັດຊືຄື " ຄວາມບໍ່ສັດຊື. "

- ຄົນອິດສະຣາເອນຖືກເອີນວ່າ " ນອກໃຈ " ເມື່ອພວກເຂົາເລີ່ມນະມັດສະການຮູບເຄົາລົບຕ່າງໆ
  ແລະເມື່ອພວກເຂົາບໍ່ເຊື່ອຟັງພຣະເຈົ້າໃນທາງອື່ນໆ.
- ໃນການແຕ່ງງານ, ບາງຄົນເຮັດຜິດປະເວນີ " ບໍ່ສັດຊື" ກັບຄູ່ແຕ່ງງານຂອງລາວ.
- ພຣະເຈົ້າຊົງໃຊ້ຄໍາວ່າ " ຄວາມບໍ່ສັດຊື " ອະທິບາຍເຖິງ

ພຶດຕິກໍາທີ່ບໍ່ເຊື່ອຟັງຂອງອິດສະຣາເອນ. ພວກເຂົາບໍ່ເຊື່ອຟັງພຣະເຈົ້າຫລືບໍ່ຖວາຍພຣະກຽດແກ່ພຣະອົງ.

### ຄໍາແນະນໍາໃນການແປ

- ຂຶ້ນຢູ່ກັບກໍລະນີ " ບໍ່ສັດຊື " ສາມາດແປວ່າ, " ບໍ່ຈົງຮັກພັກດີ " ຫລື ' ບໍ່ເຊື່ອ " ຫລື " ບໍ່ເຊື່ອຟັງ " ຫລື " ບໍ່ພັກດີ. "
- ຖ້ອຍຄໍາທີ່ວ່າ " ຄົນນອກໃຈ" ອາດຈະແປວ່າ, " ຄົນທີ່ບໍ່ສັດຊື "

## ບໍ່ເຄົາລົບກົດໝາຍ, ການບໍ່ເຄົາລົບກົດໝາຍ

### ນິຍາມ

ຕໍາວ່າ " ບໍ່ເຄົາລົບກົດໝາຍ " ອະທິບາຍບຸກຄົນຜູ້ທີ່ບໍ່ເຊື່ອຟັງກົດໝາຍ ຫຼື ຂໍ້ບັງຄັບໃດໆ ເມື່ອປະເທດຫຼືກຸ່ມໍາຄົນຢູ່ໃນສະຖານະທີ " ການບໍ່ເຄົາລົບກົດໝາຍ " ໝາຍຄວາມວ່າການບໍ່ເຊື່ອຟັງ ການກະບົດ ຫຼື ການຜິດ ສິນລະທໍາ.

- ຄົນບໍ່ເຄົາລົບກົດໝາຍຄືຄົນທີ່ກະບົດ ແລະ ບໍ່ເຊື່ອຟັງກົດບັນຍັດຂອງພຣະເຈົ້າ.
- ອັກຄະສາວົກໂປໂລໄດ້ບັນທຶກໃນວັນສຸດທ້າຍຈະມີ " ຄົນທີ່ບໍ່ເຄົາລົບກົດໝາຍ " ຫຼື " ຄົນທີ່ບໍ່ເຄົາລົບກົດໝາຍ "
  ຜູ້ທີ່ໄດ້ຮັບອິດທິພົນຈາກມານຊາຕານເຮັດສິ່ງທີ່ບໍ່ດີຕ່າງໆ.

### ຄໍາແນະນໍາໃນການແປ

- ຄໍາວ່າ "' ບໍ່ເຄົາລົບກົດໝາຍ " ສາມາດແປວ່າ " ກະບົດ " ຫຼື " ບໍ່ເຊື່ອຟັງ " ຫຼື " ຕໍ່ຕ້ານກົດໝາຍ."


generated on Thu Jul 10 08:45:04 2025

- ຄຳວ່າ " ການບໍ່ເຄົາລົບກົດໝາຍ " ສາມາດແປວ່າ " ບໍ່ເຊື່ອຟັງກົດໝາຍໃດ‌ ‌ " ຫຼື " ການກະບົດ."

## ບໍ່ເຊື່ອຟັງ, ບໍ່ເຊື່ອຟັງ, ການບໍ່ຊື່ອຟັງ

### ນິຍາມ

ຄຳວ່າ "ບໍ່ເຊື່ອຟັງ" ໝາຍເຖິງບໍ່ເຊື່ອຟັງສິ່ງທີ່ບາງຄົນທີ່ມີອຳນາດໄດ້ສັ່ງຫຼືສັ່ງສອນຄົນທີ່ທຳເຊັ່ນນີ້ເປັນຄົນ "ບໍ່ເຊື່ອຟັງ".

- ຄົນທີ່ທຳສິ່ງທີ່ເຂົາບອກວ່າບໍ່ຕ້ອງທຳຄືການບໍ່ເຊື່ອຟັງ.
- ການບໍ່ເຊື່ອຟັງຍັງໝາຍເຖິງການປະຕິເສດທີ່ຈະທຳສິ່ງທີ່ໄດ້ຮັບຄຳສັ່ງໃຫ້ທຳ.
- ຄຳວ່າ "ການບໍ່ເຊື່ອຟັງ" ຍັງໃຊ້ເພື່ອການອະທິບາຍເຖິງລັກສະນະຂອງບຸກຄົນທີ່ບໍ່ເຊື່ອຟັງຫຼືກະບົດຈົນເປັນນິໄສ ໝາຍຄວາມວ່າພວກເຂົາເປັນຄົນບາບຫຼືຄົນຊົ່ວ.
- ຄຳວ່າ "ການບໍ່ເຊື່ອຟັງ" ໝາຍເຖິງ "ການກະທຳທີ່ບໍ່ເຊື່ອຟັງ" ຫຼື "ພຶດຕິກຳທີ່ຂັດກັບພຣະປະສົງຂອງພຣະເຈົ້າ".
- "ຄົນທີ່ບໍ່ເຊື່ອຟັງ" ອາດແປວ່າ "ຄົນທີ່ບໍ່ເຊື່ອຟັງສະເໝີ" ຫຼື "ຄົນທີ່ບໍ່ໄດ້ທຳໃນສິ່ງທີ່ພຣະເຈົ້າຊົງບັນຊາ".

## ບໍ່ເຊື່ອໃນພຣະເຈົ້າ, ໂດຍບໍ່ມີພຣະເຈົ້າ, ບໍ່ເຂັ້ມງວດໃນການເຄົາລົບນັບຖືພຣະເຈົ້າ, ການບໍ່ເຊື່ອໃນພຣະເຈົ້າ

### ນິຍາມ

ຄຳວ່າ "ບໍ່ເຊື່ອໃນພຣະເຈົ້າ" ແລະ "ບໍ່ມີພຣະເຈົ້າ" ອະທິບາຍເຖິງຜູ້ທີ່ຢູ່ໃນການກະບົດຕໍ່ພຣະເຈົ້າ.
ການດຳລົງຊີວິດໃນທາງທີ່ຊົ່ວຮ້າຍໂດຍບໍ່ຄິດເຖິງພຣະເຈົ້າຜູ້ເອີ້ນວ່າ "ບໍ່ເຄັ່ງຄັດໃນການນັບຖືພຣະເຈົ້າ" ຫລື "ຄວາມບໍ່ເຊື່ອຖືພຣະເຈົ້າ"

- ຄວາມໝາຍຂອງຖ້ອຍຄຳເຫລົ່ານີ້ແມ່ນຄ້າຍຄືກັນຫລາຍ, ເຖິງຢ່າງໃດ‌ກໍ‌ຕາມ, "ຄວາມບໍ່ເຊື່ອຖືພຣະເຈົ້າ " ແລະ "ຄວາມບໍ່ເຄົາລົບຕໍ່ພຣະເຈົ້າ" ອາດຈະອະທິບາຍເຖິງພາບການທີ່ຮ້າຍແຮງ‌ທີ່ຜູ້ຄົນ‌ຫລື‌ປະເທດ‌ຕ່າງໆ. ບໍ່ຍອມເອົາພຣະເຈົ້າ‌ຫລື‌ສິດ‌ທິ‌ຂອງ‌ພຣະ‌ອົງ‌ທີ‌ຈະ‌ປົກ‌ຄອງ‌ພວກ‌ເຂົາ.
- ພຣະເຈົ້າຊົງປະກາດການພິພາກສາ‌ແລະ‌ຄວາມ‌ໂກດ‌ແຄ້ນ‌ຕໍ່‌ຄົນ‌ທີ‌ບໍ່‌ເຊື່ອ‌ໃນ‌ພຣະ‌ເຈົ້າ‌ແລະ‌ກັບ‌ທຸກ‌ຄົນ‌ທີ‌ປະ‌ຕິ‌ເສດ‌ພຣະ‌ອົງ‌ແລະ‌ທາງ‌ຂອງ‌ພຣະ‌ອົງ

### ຄຳ‌ແນະ‌ນຳ‌ໃນ‌ການ‌ແປ

- ອີງ‌ຕາມ‌ສະ‌ພາບ‌ການ, ຄຳ‌ວ່າ "ບໍ່‌ເຊື່ອ‌ໃນ‌ພຣະ‌ເຈົ້າ" ອາດ‌ຖືກ‌ແປ‌ວ່າ "ບໍ່‌ພໍ‌ໃຈ‌ພຣະ‌ເຈົ້າ" ‌ຫລື "ບໍ່‌ມີ‌ສິນ‌ທຳ" ‌ຫລື "ບໍ່‌ເຊື່ອ‌ຟັງ‌ພຣະ‌ເຈົ້າ".
- ຄຳ‌ວ່າ "ບໍ່‌ມີ‌ພຣະ‌ເຈົ້າ" ‌ແລະ "ບໍ່‌ຈິງ‌ຈັງ‌ໃນ‌ການ‌ເຄົາ‌ລົບ‌ພຣະ‌ເຈົ້າ" ‌ໝາຍ‌ເຖິງ‌ຄົນ‌ທີ "ບໍ່‌ມີ‌ພຣະ‌ເຈົ້າ" ‌ຫລື "ບໍ່‌ຄິດ‌ເຖິງ‌ເລື‌ອງ‌ພຣະ‌ເຈົ້າ" ‌ຫລື "ບໍ່‌ຍອມ‌ຮັບ‌ເອົາ‌ພຣະ‌ເຈົ້າ"
- ການ‌ແປ‌ພາ‌ສາ‌ອື‌ນ‌ໆ ‌ຂອງ‌ຄຳ‌ວ່າ "ບໍ່‌ຈິງ‌ຈັງ‌ໃນ‌ການ‌ເຄົາ‌ລົບ‌ພຣະ‌ເຈົ້າ" ‌ຫລື "ຄວາມ‌ບໍ່‌ເຊື່ອ‌ພຣະ‌ເຈົ້າ" ‌ສາ‌ມາດ‌ເປັ‌ນ " ‌ຄວາມ‌ຊົ່ວ‌ຮ້າ‌ຍ" ‌ຫລື " ‌ສິ‌ງ‌ຊົ່ວ‌ຮ້າ‌ຍ" ‌ຫລື "ກະ‌ບົດ‌ຕໍ່‌ພຣະ‌ເຈົ້າ"

## ບໍ່ໃຫ້ກຽດ, ຢ່າງບໍ່ໃຫ້ກຽດ

### ນິຍາມ

ຄຳ‌ວ່າ "ບໍ່‌ໃຫ້‌ກຽ‌ດ" ‌ໝາ‌ຍ‌ເຖິ‌ງ‌ກ‌ານ‌ກ‌ະ‌ທຳ‌ບ‌າ‌ງ‌ສິ‌ງ‌ທີ‌ບ‌ໍ‌ໜ‌ ‌ເ‌ຄົ‌າ‌ລົ‌ບ‌ກ‌ັ‌ບ‌ບ‌າ‌ງ‌ຄົ‌ນ.‌ນ‌ີ‌ຍ‌ັ‌ງ‌ທ‌ຳ‌ໃ‌ຫ‌ ‌ຄົ‌ນ‌ນ‌ັ‌ນ‌ເ‌ປ‌ັ‌ນ‌ທ‌ີ‌ໜ‌ ‌ອ‌າ‌ຍ‌ຫ‌ຼ‌ື‌ຂ‌າ‌ຍ‌ໜ‌ ‌.

- ບາງ‌ຄັ‌ ‌ງ "ຢ‌ ‌ ‌

## ບໍ່ໄດ້ກຳໄລ, ບໍ່ໄດ້ປະໂຫຍດ

### ນິຍາມ

ຄຳວ່າ "ບໍ່ໄດ້ກຳໄລ" ໝາຍເຖິງບໍ່ມີປະໂຫຍດ.

- ຄຳນີ້ຕາມຕົວອັກສອນແປວ່າບໍ່ໄດ້ກຳໄລຫຍັງເລີຍ ຫລືບໍ່ໄດ້ຊ່ວຍໃຜໃຫ້ໄດ້ຮັບຫຍັງເລີຍ.
- ບາງສິ່ງທີ່ບໍ່ມີກຳໄລບໍ່ມີຄ່າຈະເຮັດໄປເຮັດຫຍັງ ເພາະວ່າມັນບໍ່ໄດ້ໃຫ້ປະໂຫຍດຫຍັງ.
- ນິອາດແປວ່າ "ຂາດປະໂຫຍດ" ຫລື "ຂາດຄຸນຄ່າ" ຫລື "ບໍ່ເປັນປະໂຫຍດ" ຫລື "ບໍ່ຄູ່ຄວນ" ຫລື "ບໍ່ເປັນປະໂຫຍດ" ຫລື "ບໍ່ໃຫ້ປະໂຫຍດ."

## ບໍ່ໄດ້ຮັບພິທີຕັດ, ບໍ່ເຂົ້າພິທີຕັດ

### ນິຍາມ

ຄຳວ່າ "ບໍ່ເຂົ້າພິທີຕັດ "ແລະ " ການບໍ່ເຂົ້າພິທີຕັດ" ອ້າງເຖິງຜູ້ຊາຍທີ່ບໍ່ໄດ້ຮັບການເຂົ້າພິທີຕັດທາງກາຍ ຄຳເຫລົ່ານີ້ໃຊ້ເປັນເຊີງປຽບທຽບດ້ວຍ.

- ເອຢິບເປັນປະເທດທີ່ຕ້ອງເຂົ້າພິທີຕັດດ້ວຍ. ດັ່ງນັ້ນເມື່ອພຣະເຈົ້າກ່າວກັງວົນກັບເອຢິບທີ່ພ່າຍແພ້ໂດຍຜູ້ " ບໍ່ໄດ້ເຂົ້າພິທີຕັດ, " ພຣະອົງໝາຍຊຶ່ງເຖິງຄົນທີ່ຊາວເອຢິບປຽບຫຍ່ຳມເພາະບໍ່ໄດ້ເຂົ້າພິທີຕັດ.
- ພຣະຄຳອ້າງເຖິງຄົນທີ່ມີ " ຫົວໃຈທີ່ບໍ່ໄດ້ເຂົ້າພິທີຕັດ " ຫລືຜູ້ທີ " ບໍ່ເຂົ້າພິທີຕັດໃນຫົວໃຈ. " ການກ່າວເຊີງປຽບທຽບນີ້ວ່າຄົນເຫລົ່ານີ້ບໍ່ແມ່ນຄົນຂອງພຣະເຈົ້າ, ແລະເປັນຄົນຄຶດຄ້ານບໍ່ເຊື່ອຟັງພຣະອົງ.

### ຄຳແນະນຳໃນການແປ

- ຖ້າຄຳ"ວ່າການເຂົ້າພິທີຕັດມີການໃຊ້ຫລືເປັນທີ່ຮູ້ຈັກໃນພາສາ, "ບໍ່ເຂົ້າພິທີຕັດ" ອາດແປວ່າ "ບໍ່ໄດ້ເຂົ້າພິທີຕັດ."
- ຖ້ອຍຄຳ "ການບໍ່ເຂົ້າພິທີຕັດ" ອາດແປວ່າ "ຄົນທີ່ບໍ່ເຂົ້າພິທີຕັດ" ຫລື "ຄົນທີ່ບໍ່ໄດ້ເປັນຂອງພະເຈົ້າ," ຂຶ້ນຢູ່ກັບກໍລະນີ.
- ວິທີອື່ນໃນການແປເຊີງປຽບທຽບຂອງຄຳນີ້ອາດລວມເຖິງ, "ບໍ່ແມ່ນຄົນຂອງພຣະເຈົ້າ" ຫລື "ເປັນກະບົດເຊັ່ນຄົນທີ່ບໍ່ໄດ້ເປັນຂອງພະເຈົ້າ" ຫລື "ຄົນທີ່ບໍ່ມີເຄື່ອງໝາຍຂອງການເປັນຂອງພະເຈົ້າ."
- ຄຳກ່າວທີ່ວ່າ "ບໍ່ໄດ້ເຂົ້າພິທີຕັດໃນຫົວໃຈ" ສາມາດແປວ່າ, "ກະບົດຄືດ້ານ" ຫລື "ປະຕິເສດທີ່ຈະເຊື່ອ." ຢ່າງໃດກໍຕາມ, ຖ້າເປັນໄປໄດ້ ທາງທີ່ດີທີ່ສຸດຄວນເກັບສຳນວນຫລືຄຳທີ່ຄ້າຍຄືກັນໄວ້ເພາະການເຂົ້າພິທີຕັດທາງຈິດວິນຍານເປັນແນວຄິດທີ່ສຳຄັນ.

## ປຣິດສິນລາ

### ຂໍ້ເທັດຈິງ

ປຣິດສິນລາແລະພັວຂອງອະຄວິນລາເປັນຊາວຢິວທີ່ຮ່ວມງານກັບຄຣິສຕຽນຊາວຢິວທີ່ເຮັດວຽກກັບອັຄສາວົກໂປໂລໃນງານປະກາດຂອງທ່ານ

- ປຣິດສິນລາແລະອະຄວິນລາໄດ້ອອກຈາກໂຣມເນື່ອງຈາກຈັກກະພັດໄດ້ບັງຄັບໃຫ້ຄຣິສຕຽນອອກຈາກບ່ອນນັ້ນ
- ໂປໂລໄດ້ພົບກັບປຣິດສິນລາແລະອະຄວິນລາໃນເມືອງໂກຣິນໂທ ພວກທ່ານເປັນຄົນຫຍິບຜ້າເຕັ້ນແລະໂປໂລກໍໄດ້ຮ່ວມເຮັດວຽກກັບພວກທ່ານໃນງານນີ້ດ້ວຍ
- ເມື່ອໂປໂລຈາກເມືອງໂກຣິນໂທເພື່ອໄປຊີເຣຍປຣິດສິນລາແລະອະ ຄວິນລາກໍໄດ້ໄປກັບທ່ານດ້ວຍ
- ຈາກຊີເຣຍ ພວກທ່ານທັ້ງສາມໄດ້ໄປຢັ້ງເອເຟໂຊ ເມື່ອໂປໂລຈາກເອເຟໂຊ ປຣິດສິນລາແລະອະຄວິນລາຢັ້ງຢູ່ບ່ອນນັ້ນແລະໄດ້ດຳເນີນການເທດສະຫນາປະກາດຂ່າວປະເສີດໃນບ່ອນນັ້ນ
- ພວກທ່ານໄດ້ສອນຜູ້ຊາຍທີ່ຊື່ອໆໂປໂລໃນເອເຟໂຊໂດຍສະເພາະຜູ້ຊຶ່ງເຊື່ອໃນພະເຢຊູແລະມີຂອງປະທານໃນການເປັນຜູ້ເວົ້າແລະຜູ້ສອນ

## ປອນທັດ

### ຂໍ້ເທັດຈິງ

ປອນທັດເປັນແຂວງໜຶ່ງຂອງໂຣມໃນຊ່ວງສະໄໝຂອງຈັກກະວັດໂຣມັນແລະຄຣິດສະຕະຈັກສະໄໝເລີ່ມຕົ້ນ.
ຕັ້ງຢູ່ຕາມແນວຊາຍຝັ່ງທາງໃຕ້ຂອງທະເລດຳ ທາງຕອນເໜືອທີ່ປະຈຸບັນເປັນປະເທດຕວກກີ.

- ຕາມທີ່ມີບັນທຶກໄວ້ໃນພຣະທັມກິດຈະການ, ຄົນຈາກແຂວງປອນທັດໄດ້ຢູ່ທີ່ກຸງເຢຣູຊາເລັ່ມເມື່ອພຣະວິນຍານບໍລິສຸດສະເດັດລົງມາ ມື້ແລກເໜືອເຫຼົ້າອັກຄະສາວົກໃນມື້ວັນເພັ້ນເຕຄອດສະເຕ.
- ຜູ້ເຊື່ອຄົນໜຶ່ງຊື່ວ່າອາກີລາກໍມາຈາກປອນທັດ.

- ເມື່ອເປໂຕກຳລັງຂຽນເຖິງຄຣິດສະຕຽນທີ່ກະແຈກກະຈາຍໄປໃນ ແຄ້ວນຕ່າງໆ, ປອນທັດກໍຢູ່ໃນໜຶ່ງໃນແຄວ້ນທີ່ທ່ານໄດ້ກ່າວເຖິງ.

## ປະກອບດ້ວຍພຣະວິນຍານ

### ນິຍາມ

ຄຳວ່າ "ປະກອບດ້ວຍພຣະວິນຍານ"
ເປັນຮູບແບບການສະແດງອອກໃນທາງປຽບທຽບທີ່ໝາຍຄວາມວ່າພຣະວິນຍານບໍຣິສຸດກຳລັງເພີ່ມອຳນາດໃຫ້ບຸກຄົນທີ່ຈະທຳຕາມນ້ຳພຣະທັຍຂອງພຣະເຈົ້າ.

- ປະໂຫຍດ "ປະກອບດ້ວຍ" ເປັນສຳນວນທີ່ຫຼາຍໆຄັ້ງໝາຍເຖິງ"ຄວບຄຸມໂດຍ".
- ຜູ້ຄົນ "ປະກອບໄປດ້ວຍພຣະວິນຍານ" ເມື່ອພວກເຂົາຕິດຕາມການຊີ້ນຳຂອງພຣະວິນຍານບໍຣິສຸດ ແລະເພິ່ງພາພຣະອົງຢ່າງເຕັ້ມທີ ໃຫ້ຊ່ວຍພວກເຂົາສາມາດທຳຕາມທີ່ພຣະເຈົ້າຊົງຕ້ອງການໄດ້.

### ຄຳແນະນຳການແປ

- ຄຳນີ້ສາມາດແປໄດ້ວ່າ "ເພີ່ມອຳນາດໂດຍພຣະວິນຍານບໍຣິສຸດ" ຫຼື "ຄວບຄຸມໂດຍພຣະວິນຍານບໍຣິສຸດ."
  ແຕ່ບໍ່ຄວນຈະແປໃຫ້ຟັ່ງເໝືອນກັບວ່າພຣະວິນຍານບໍຣິສຸດກຳລັງບັງຄັບບຸກຄົນໃຫ້ທຳບາງສິ່ງ.
- ຕົວຢ່າງປະໂຫຍດເຊັ່ນນີ້ "ເຂົາໄດ້ປະກອບໄປດ້ວຍພຣະວິນຍານ" ສາມາດແປໄດ້ອີກວ່າ,
  "ເຂົາມີຊີວິດທີ່ເຕັ້ມລົ້ນໄດ້ດ້ວຍພະລັງຂອງພຣະວິນຍານ" ຫຼື "ເຂົາໄດ້ຮັບການຊີ້ນຳຢ່າງສົມບູນໂດຍພຣະວິນຍານບໍຣິສຸດ" ຫຼື
  "ພຣະວິນຍານບໍຣິສຸດໄດ້ຊີ້ນຳເຂົາຢ່າງສົມບູນ."
- ຄຳນີ້ມີຄວາມໝາຍທີ່ຄ້າຍຄືກັບສຳນວນທີ່ວ່າ "ມີຊີວິດຢູ່ໂດຍພຣະວິນຍານ" ແຕ່ "ປະກອບດ້ວຍພຣະວິນຍານ"
  ເນັ້ນໄດ້ຢ່າງສົມບູນແບບທີ່ວ່າຄົນນັ້ນໄດ້ອະນຸຍາດໃຫ້ພຣະວິນຍານບໍຣິສຸດໃນການຄວບຄຸມ ຫຼືມີອິດທິພົນເໜືອຊີວິດຂອງເຂົາ.
  ດັ່ງນັ້ນຖ້າເປັນໄປໄດ້ ສຳນວນທັ້ງສອງຄວນມີການແປທີ່ແຕກຕ່າງກັນ.

## ປະກາດ, ຖະແຫລງການ

### ນິຍາມ

ປະກາດ ເປັນການແຖລງຫລືການແຈ້ງບາງສິ່ງຢ່າງເປີດເຜຍແລະຢ່າງກ້າຫານ

- ຫລາຍເທື່ອໃນພະຄັມພີ ຄຳວ່າ "ປະກາດ" ໝາຍເຖິງການແຖລງບາງສິ່ງບາງຢ່າງຕໍ່ສາທາລະນະຕາມທີ່ພະເຈົ້າໄດ້ຊົງບັນຊາໄວ້
  ຫລືບອກຄົນອື່ນເຖິງເລື່ອງຣາວພະເຈົ້າແລະເຖິງຄວາມຍິ່ງໃຫຍ່ຂອງພະອົງ
- ໃນພັນທສັນຍາໃໝ່ ເຫຼົ່າອັຄສາວົກປະກາດຂ່າວປະເສີດເລື່ອງຣາວກ່ຽວກັບພະເຢຊູໃຫ້ຫຼາຍຄົນໃນເມືອງແລະແຄວ້ນຕ່າງໆ
- ຄຳວ່າ "ປະກາດ" ສາມາດໃຊ້ກັບພະຣາຊະດີກາໂດຍກະສັດຫລືເພື່ອການປະນາມຄວາມຊົ່ວຮ້າຍຕໍ່ສາທາລະນະຊົນ
- ວິທີອື່ນໃນການແປຄຳວ່າ "ປະກາດ" ສາມາດລວມທັ້ງຄຳວ່າ "ການແຖລງ" ຫລື"ເທດສະຫນາຢ່າງເປີດເຜຍ" ຫລື
  "ປະກາດຢ່າງເປີດເຜຍ"
- ຄຳວ່າ "ຄຳປະກາດ" ສາມາດແປໄດ້ວ່າ "ຄຳແຖລງ" ຫລື "ການເທດສະຫນາໃນທີ່ສາທາລະນະ"

## ປະຈັກພະຍານ,ເປັນພະຍານ

### ນິຍາມ

ຄຳວ່າ "ປະຈັກພະຍານ" ແລະ "ພະຍານ" ແມ່ນການເວົ້າກ່ຽວກັບບາງສິ່ງບາງຢ່າງທີ່ຄົນໜຶ່ງຮູ້ວ່າເປັນຄວາມຈິງ.

- ປົກກະຕິແລ້ວບຸກຄົນໃດຫນຶ່ງ "ເປັນພະຍານ" ກ່ຽວກັບບາງສິ່ງບາງຢ່າງທີ່ລາວໄດ້ປະສົບໂດຍກົງ.
- ພະຍານທີ່ໃຫ້ "ການເປັນພະຍານບໍ່ຈິງ" ບໍ່ໄດ້ເວົ້າຄວາມຈິງກ່ຽວກັບສິ່ງເກິດຂຶ້ນ.
- ບາງຄັ້ງຄຳວ່າ "ປະຈັກພະຍານ" ອ້າງເຖິງຄຳປະກາດພຣະຄຳແລະຜູ້ປະກາດພຣະຄຳ.
- ໃນພຣະຄຳພີໃໝ່ ຄຳນີ້ມັກໃຊ້ອ້າງເຖິງຜູ້ຕິດຕາມຂອງພຣະເຢຊູເຈົ້າໄດ້ເປັນພະຍານເຖິງເຫດການທີ່ເກິດຂຶ້ນໃນຊີວິດ
  ຄວາມຕາຍແລະການຄືນຈາກຕາຍຂອງພຣະເຢຊູເຈົ້າ.

### ຄຳແນະນຳໃນການແປ

- ຄຳວ່າ "ເປັນພະຍານ" ຫຼື "ໃຫ້ການເປັນພະຍານ" ສາມາດແປວ່າ "ບອກຂ້ໍແທ້ຈິງ" ຫຼື "ບອກສິ່ງທີ່ໄດ້ເຫັນຫຼືໄດ້ຍິນ" ຫຼື
  "ບອກເລົ່າຈາກປະສົບການສ່ວນຕົວ" ຫຼື "ໃຫ້ຫລັກຖານ" ຫຼື "ບອກສິ່ງທີ່ໄດ້ເກິດຂຶ້ນ".


generated on Thu Jul 10 08:45:04 2025

- ວິທີການແປ "ການເປັນພະຍານ" ສາມາດລວມເຖິງ "ລາຍງານວ່າເກີດສິ່ງໃດຂຶ້ນ" ຫຼື "ຄຳຖະແຫລ່ງວ່າອັນໃດເປັນຄວາມຈິງ" ຫຼື "ຫລັກຖານ" ຫຼື"ສິ່ງທີ່ໄດ້ຮັບການເວົ້າ" ຫຼື "ຄຳຫໍ່ານວ່ານ".
- ປະໂຫຍກທີ່ວ່າ, "ເປັນປະຈັກພະຍານຕໍ່ພວກເຂົາ" ສາມາດຖືກແປເປັນ, "ເພື່ອສະແດງໃຫ້ພວກເຂົາເຫັນສິ່ງທີ່ເປັນຄວາມຈິງ" ຫຼື "ເພື່ອພິສູດໃຫ້ພວກເຂົາຮູ້ວ່າອັນໃດແມ່ນຄວາມຈິງ."
- ປະໂຫຍກທີ່ວ່າ "ເປັນພະຍານຕໍ່ຕ້ານກັບພວກເຂົາ" ອາດແປວ່າ"ເຊິ່ງຈະສະແດງໃຫ້ພວກເຂົາເຫັນເຖິງຄວາມບາບຂອງເຂົາ" ຫຼື "ເປີດເຜີຍຄວາມໝ້ຳຊືໃຈຄົດຂອງພວກເຂົາ" ຫຼື "ເຊິ່ງຈະພິສູດໄດ້ວ່າພວກເຂົາຜິດ".
- ການ "ໃຫ້ຄຳພະຍານບໍ່ຈິງ" ສາມາດແປວ່າ "ເວົ້າເລື່ອງບໍ່ຈິງກ່ຽວກັບ" ຫຼື "ລະບຸສິ່ງທີ່ບໍ່ເປັນຈິງ".

## ປະຊາກອນຂອງພຣະເຈົ້າ, ປະຊາກອນຂອງເຮົາ

### ນິຍາມ

ຄຳວ່າ "ປະຊາກອນຂອງພຣະເຈົ້າ" ອ້າງເຖິງປະຊາຊົນທີ່ພຣະເຈົ້າຊົງເອີ້ນອອກມາຈາກຝ່າຍໂລກເພື່ອໃຫ້ມີຄວາມສຳພັນພິເສດກັບພຣະອົງ

- ເມື່ອພຣະເຈົ້າສັ່ງວ່າ "ປະຊາກອນຂອງເຮົາ" ນັ້ນພຣະອົງຊົງກຳລັງກ່າວເຖິງປະຊາກອນ ທີ່ພຣະອົງຊົງເລືອກແລະຜູ້ທີ່ມີຄວາມສຳພັນກັບພຣະອົງ
- ປະຊາກອນຂອງພຣະເຈົ້າໄດ້ຮັບການຊົງເລືອກໂດຍພຣະອົງເອງແລະຖືກແຍກອອກມາຈາກໂລກເພື່ອດຳເນີນຊີວິດໃຫ້ເປັນທີ່ພໍພະໄທຂອງພຣະອົງ ພະອົງຊົງເອີ້ນພວກທ່ານວ່າລູກຫຼານຂອງພຣະອົງ
- ໃນພັນທະສັນຍາເດີມ ຄຳວ່າ "ປະຊາກອນຂອງພຣະເຈົ້າ" ອ້າງເຖິງຊົນຊາດອິດສະລາເອນເຊິ່ງໄດ້ຮັບການຊົງເລືອກຈາກພຣະເຈົ້າແລະຖືກແຍກອອກມາຈາກຊົນຊາດອື່ນໆ ຂອງໂລກເພື່ອຮັບໃຊ້ແລະເຊື່ອຟັງພຣະອົງ
- ໃນພັນທະສັນຍາໃໝ່ ຄຳວ່າ "ປະຊາກອນຂອງພຣະເຈົ້າ" ເວົ້າເຖິງຄົນທັງໝົດທີ່ເຊື່ອໃນພຣະເຢຊູແລະຖືກເອີ້ນວ່າຄຣິດຕະຈັກ ຮວມ ທັງຊາວຢິວແລະຊາວຕ່າງຊາດ

### ຄຳແນະນຳໃນການແປ

- ຄຳວ່າ "ປະຊາກອນຂອງພຣະເຈົ້າ" ສາມາດແປອີກຢ່າງໄດ້ວ່າ "ປະຊາກອນຂອງພຣະເຈົ້າ" ຫຼື "ປະຊາກອນທີ່ນະມັດການພຣະເຈົ້າ" ຫຼື "ປະຊາກອນຜູ້ຮັບໃຊ້ພຣະເຈົ້າ" ຫຼື "ປະຊາກອນເຊິ່ງເປັນຂອງພຣະເຈົ້າ"
- ວິທີອື່ນທີ່ແປ "ປະຊາກອນຂອງເຮົາ" ເມື່ອພຣະເຈົ້າຊົງກ່າວນັ້ນ ສາມາດທັງໝົດ "ປະຊາກອນທີ່ເຮົາໄດ້ເລືອກໄວ້" ຫຼື "ປະຊາກອນຊຶ່ງນະມັດການເຮົາ" ຫລື "ປະຊາກອນເຊິ່ງເປັນຂອງເຮົາ"
- ໃນຫໍ່ານອງຄ້າຍກັນ ຄຳວ່າ "ປະຊາກອນຂອງທ່ານ" ສາມາດແປອີກຢ່າງໄດ້ວ່າ "ປະຊາກອນເຊິ່ງເປັນຂອງທ່ານ" ຫຼື "ປະຊາກອນຊຶ່ງທ່ານໄດ້ເລືອກໃຫ້ເປັນຂອງທ່ານ"
- "ປະຊາກອນຂອງພຣະອົງເຈົ້າ" ສາມາດແປອີກຢ່າງໄດ້ວ່າ "ປະຊາກອນເຊິ່ງເປັນຂອງພຣະອົງເຈົ້າ" ຫຼື "ປະຊາກອນເຊິ່ງພຣະເຈົ້າຊົງເລືອກໃຫ້ເປັນຂອງພຣະອົງ"

## ປະຕິຍານ

### ນິຍາມ

ຄຳວ່າ "ຄຳປະຕິຍານ" ໝາຍເຖິງການໃຫ້ຄຳສັນຍາຢ່າງຈິງຈັງຢ່າງເປັນທາງການເພື່ອເຮັດບາງຢ່າງຫລືໃຫ້ບາງຢ່າງ.

- ໃນພັນທະສັນຍາເດີມເຈົ້າຫນ້າທີ່ຂອງອິດສະຣາເອນໃຫ້ສັດຈະປະຕິຍານວ່າຈະຈົ່ງຮັກພັກດີຕໍ່ກະສັດດາວິດ.
- ສິ່ງຂອງທີ່ໃຫ້ໄປເພື່ອເປັນມັດຈຳຈະກັບມາຍັງເຈົ້າຂອງເມື່ອໄດ້ເຮັດຕາມສັນຍາແລ້ວ.
- "ການປະຕິຍານ" ສາມາດແປໄດ້ວ່າ "ການໃຫ້ຄຳໝັ້ນສັນຍາຢ່າງເປັນທາງການ" ຫລື "ການສັນຍາຢ່າງຈິງຈັງ."
- ຄຳວ່າ "ມັດຈຳ" ສາມາດໝາຍເຖິງສິ່ງຂອງທີ່ໃຫ້ໄປເພື່ອຫຼັກປະກັນຫລືສັນຍາວ່າໝີ່ນັ້ນຈະໄດ້ຮັບຊຳລະ.
- ວິທີແປຄຳວ່າ "ການປະຕິຍານ" ສາມາດລວມເຖິງ "ຄຳໝັ້ນສັນຍາ" ຫລື "ພັນທະສັນຍາທາງການ" ຫລື"ຫຼັກປະກັນ "ຫລື "ຄຳສັນຍາທາງການ" ຂຶ້ນຢູ່ກັບບໍລິບົດ.

## ປະຕິເສດ

### ນິຍາມ

ການ“ ປະຕິເສດ” ບາງຄົນຫລືບາງສິ່ງບາງຢ່າງໝາຍ ເຖິງການປະຕິເສດທີ່ຈະຍອມຮັບເອົາຄົນນັ້ນຫລືສິ່ງຂອງ.

- ຄຳວ່າ "ປະຕິເສດ" ຍັງສາມາດໝາຍຄວາມວ່າ "ປະຕິເສດບໍ່ເຊື່ອ" ບາງຢ່າງ.


generated on Thu Jul 10 08:45:04 2025

- ການປະຕິເສດພຣະເຈົ້າກໍ ໝາຍເຖິງການປະຕິເສດທີ່ຈະເຊື່ອຟັງພຣະອົງ.
- ເມື່ອຊາວອິສະລາແອນປະຕິເສດການນຳຂອງໂມເຊ, ມັນ ໝາຍຄວາມວ່າພວກເຂົາໄດ້ກະບົດຕໍ່ ອຳ ນາດຂອງລາວ. ພວກເຂົາບໍ່ຕ້ອງການເຊື່ອຟັງພຣະອົງ.
- ຊາວອິສະຣາເອນສະແດງໃຫ້ເຫັນວ່າພວກເຂົາປະຕິເສດພຣະເຈົ້າເມື່ອພວກເຂົານະມັດສະການພຣະປອມ.
- ຄຳ ວ່າ“ ຢັ ໝີ” ແມ່ນຄວາມ ໝາຍ ຕົວຈິງຂອງ ຄຳ ນີ. ພາສາອື່ນໆອາດຈະມີການສະແດງອອກຄ້າຍຄືກັນເຊິ່ງມີຄວາມ ໝາຍ ວ່າຈະປະຕິເສດຫລືປະຕິເສດທີ່ຈະເຊື່ອບາງຄົນຫລືບາງຢ່າງ.

% ຄຳແນະໃນນຳການແປ

- ຂຶ້ນຢູ່ກັບບໍຣິບົດ, ຄຳ ວ່າ "ປະຕິເສດ" ຍັງສາມາດແປໄດ້ໂດຍ "ບໍ່ຍອມຮັບ" ຫຼື "ຢຸດການຊ່ວຍເຫຼືອ" ຫຼື "ປະຕິເສດບໍ່ເຊື່ອຟັງ" ຫຼື "ຢຸດການເຊື່ອຟັງ."
- ໃນການສະແດງອອກ, "ກ້ອນຫີນທີ່ຜູ້ກໍ່ສ້າງປະຕິເສດ," ຄຳວ່າ "ປະຕິເສດ" ສາມາດແປເປັນ "ປະຕິເສດທີ່ຈະໃຊ້" ຫຼື "ບໍ່ຍອມຮັບ" ຫຼື "ໂຍນຖິ້ມ" ຫຼື "ກຳຈັດບໍ່ມີຄ່າ."
- ໃນສະພາບການຂອງປະຊາຊົນທີ່ປະຕິເສດຄຳສັ່ງຂອງພຣະ ເຈົ້າ, ສິ່ງນີ້ສາມາດແປເປັນ "ປະຕິເສດທີ່ຈະເຊື່ອຟັງ" ຄຳສັ່ງຂອງພຣະອົງຫລື "ເລືອກທີ່ແຂງກະດ້າງທີ່ຈະບໍ່ຍອມຮັບເອົາ" ກິດ ໝາຍ ຂອງພຣະເຈົ້າ.

## ປະຕູ, ຮາວປະຕູ

### ນິຍາມ

"ປະຕູ"
ຄືເຄື່ອງກີດຂວາງທີ່ທາງເຂົ້າທີ່ຮົ້ວຫຼືກຳແພງລ້ອມຮອບບ້ານຫລືເມືອງ."ຮາວປະຕູ"ອ້າງເຖິງຮາວໄມ້ຫລືຮາວເຫຼັກທີ່ສາມາດເລື່ອນມາລັອກທີ່ປະຕູ.

- ປະຕູເມືອງສາມາດເປີດເພື່ອໃຫ້ຄົນ,ສັດ,ແລະລົດຂົນຂອງທີ່ເດີນທາງເຂົ້າອອກໃນເມືອງ.
- ເພື່ອປົກປ້ອງເມືອງ ,ກຳແພງແລະປະຕູຈະໜາແລະແຂງແຮງ.

ປະຕູປິດແລ້ວຈະຖືກລັອກດ້ວຍທ່ອນເຫລັກຫລືໄມ້ເພື່ອປ້ອງກັນສັດຕູຫຼືທະຫານຈາກເມືອງອື່ນເຂົ້າໄປໃນເມືອງ.

- ປະຕູເມືອງຫລາຍຄັ້ງມັກທີ່ເປັນຂ່າວສານແລະສຸນທາງສັງຄົມຂອງໝູ່ບ້ານ.ແລະຍັງເປັນສະຖານທີ່ການແລກປ່ຽນທາງການຄ້າໄດ້ເກີດຂຶ້ນແລະການວິເຄາະ ເພາະກຳແພງເມືອງມັນໜາພຽງພໍທີ່ຈະມີທາງເຂົ້າທີ່ທຳໃຫ້ເກີດຮົ້ມຈາກຄວາມຮ້ອນຂອງຕາເວັນ.ພົນລະເມືອງໄດ້ພົບວ່ານັ່ງສະບາຍໃນຮົ້ມເພື່ອທຳທຸລະກິ

### ຄຳແນະນຳການແປ

- ຂຶ້ນຢູ່ກັບບໍຣິບົດ ,ອີກແນວທາງໃນການແປຄຳວ່າ"ປະຕູຮົ້ວ"

ແປໄດ້ອີກວ່າ"ປະຕູ"ຫລື "ຜະໜັງເປີດ" ຫລື "ເຄື່ອງກັ້ນ" ຫລື "ທາງເຂົ້າ."

- ຄຳເວົ້າທີ່ວ່າ "ທີ່ກັ້ນຂອງປະຕູ" ສາມາດແປໄດ້ອີກວ່າ"ກອນປະຕູ"

ຫລື "ໄມ້ຄານເພື່ອລັອກປະຕູ."

## ປະທັບຕາ, ປິດຕາປະທັບ

### ນິຍາມ

ການປະທັບຕາ ໝາຍ ຄວາມວ່າໃຫ້ມັນປິດດ້ວຍສິ່ງທີ່ເຮັດໃຫ້ມັນບໍ່ສາມາດເປີດໄດ້ໂດຍບໍ່ຕ້ອງທຳລາຍປະທັບຕາ.

- ປົກກະຕິແລ້ວປະທັບຕາຖືກໝາຍ ດ້ວຍການອອກແບບເພື່ອສະແດງວ່າມັນແມ່ນໃຜ.
- ຂີ້ເຜິ້ງທີ່ຫລອມເຫລວຖືກໃຊ້ເພື່ອປະທັບຕົວໜັງສື ຫລືເອກະສານອື່ນໆທີ່ຈຳເປັນເພື່ອປ້ອງກັນ.ໃນເວລາທີ່ຂີ້ເຜິ້ງເຢັນລົງແລະແຂງ, ຈົດໝາຍບໍ່ສາມາດເປີດໄດ້ໂດຍບໍ່ທຳລາຍປະທັບຕາຂີ້ເຜິ້ງ.
- ປະທັບຕາໃສ່ກ້ອນຫີນຢູ່ຕໍ່ໜ້າອຸບໂມງຂອງພຣະເຢຊູເພື່ອບໍ່ໃຫ້ຜູ້ໃດຍ້າຍໄປມາ.
- ໃນຕົວຢ່າງໂປໂລກ່າວເຖິງພຣະວິນຍານບໍລິສຸດເປັນ“ ປະທັບຕາ” ທີ່ສະແດງໃຫ້ເຫັນວ່າຄວາມລອດຂອງພວກເຮົາມີຄວາມປອດໄພ.


generated on Thu Jul 10 08:45:04 2025

## ປະນາມ, ການປະນາມ

### ນິຍາມ

ຄຳວ່າ "ປະນາມ" ແລະ "ການປະນາມ" ການຕັດສິນຄົນໃດຄົນໜຶ່ງທີ່ເຮັດຜິດບາງຢ່າງ.

- ຫລາຍຄັ້ງຄຳວ່າ "ປະນາມ" ລວມເຖິງການລົງໂທດຄົນນັ້ນສຳລັບຄວາມຜິດທີ່ເຂົາໄດ້ກະທຳ.
- ບາງຄັ້ງຄຳວ່າ "ປະນາມ" ເວົ້າເຖິງ ການກ່າວຫາຄົນໃດຄົນໜຶ່ງຢ່າງຜິດໆ ຫຼືການຕັດສິນບາງຄົນຢ່າງຫຍາບຊ້ຳ.
- ຄຳວ່າ "ການປະນາມ" ເວົ້າເຖິງການກະທຳຂອງການປະນາມ ຫຼືການດ່າບາງຄົນ.

### ຄຳແນະນຳໃນການແປ

- ຄຳນີ້ສາມາດແປຕາມຕົ້ນຍຄຳໄດ້ວ່າ "ການຕັດສິນຢ່າງບໍ່ເປັນທຳ" ຫຼື "ວິພາກວິຈານຢ່າງຜິດໆ."
- ຄຳວ່າ "ປະນາມເຂົາ" ສາມາດແປໄດ້ວ່າ, "ຕັດສິນວ່າເຂົາມີຄວາມຜິດ" ຫຼື "ກ່າວວ່າເຂົາຕ້ອງຖືກລົງໂທດເພາະບາບຂອງເຂົາ."
- ຄຳວ່າ "ການປະນາມ" ສາມາດແປໄດ້ວ່າ, "ການຕັດສິນທີ່ບໍ່ເປັນທຳ" ຫຼື "ການປະກາດວ່າມີຄວາມຜິດ" ຫຼື "ການລົງໂທດຄວາມຜິດ."

## ປະເພນີ

### ນິຍາມ

ຄຳວ່າ "ປະເພນີ"
ອ້າງເຖິງຂະນົບທຳນຽມແລະການປະຕິບັດທີ່ໄດ້ຮັບການສະຫງວນຖືຮັກສາກັນມາຕາມການເວລາແລະທີ່ໄດ້ສືງໄປຫາຄົນໃນລຸ້ນຕ່ໆໄປ.

- ຫລາຍເທື່ອໃນພຣະຄຳພີ ຄຳວ່າ "ປະເພນີ" ອ້າງເຖິງຄຳສອນທັ້ງຫລາຍແລະການປະຕິບັດຫລາຍຢ່າງທີ່ຄົນໄດ້ຖືປະຕິບັດກັນ,
  ແຕ່ບໍ່ແມ່ນກົດບັນຍັດຂອງພຣະເຈົ້າ. ຄຳກ່າວວ່າ "ປະເພນີຂອງຄົນ" ຫລືປະເພນີຂອງມະນຸດສະຊາດ" ເຮັດໃຫ້ເລືອງນີ້ຊັດເຈນ.
- ວະລີຕ່າງໆ ເຊັ່ນ "ປະເພນີຂອງຜູ້ອາວຸໂສທັ້ງຫລາຍ" ຫລື "ປະເພນີຂອງບັນພະບຸລຸດຂອງຂ້ອຍ"
  ອ້າງອີງໂດຍສະເພາະເຖິງປະເພນີຂອງຊາວຢິວແລະການປະຕິບັດຕ່າງໆ
  ທີ່ຜູ້ນຳຊາວຢິວໄດ້ເພີ່ມເຂົ້າມາໃນບົດກົດບັນຍັດຂອງພຣະເຈົ້າຕາມການເວລາໂດຍຜ່ານທາງໂມເຊ. ເຖິງຢ່າງນັ້ນ
  ປະເພນີທີ່ເພີ່ມເຂົ້າມານີ້ກໍ່ບໍ່ໄດ້ເປັນມາຈາກພຣະເຈົ້າ, ປະຊາຊົນຄິດວ່າພວກເຂົາຕ້ອງເຊື່ອຟັງເພື່ອຈະເປັນຄົນຊອບທຳ.
- ອັກຄະສາວົກໂປໂລໄດ້ໃຊ້ຄຳສັບ "ປະເພນີ"
  ໃນຫລາຍທາງເພື່ອອ້າງອີງເຖິງການປະຕິບັດຂອງຄຣິດສະຕຽນທີ່ມາຈາກພຣະເຈົ້າແລະທ່ານແລະສາວົກຄົນອື່ນໆ
  ກໍ່ໄດ້ສັ່ງສອນຜູ້ເຊື່ອໃໝ່.
- ໃນເວລາສະໄໝໃໝ່, ມີປະເພນີຂອງຄຣິດສະຕຽນຫລວງຫລາຍທີ່ບໍ່ໄດ້ສອນໃນພຣະຄຳພີ,
  ແຕ່ກໍ່ມີຜົນເປັນທີ່ຍອມຮັບຕາມປະຫວັດສາດໃນປະເພນີແລະການປະຕິບັດເຫລົ່ານີ້.
  ປະເພນີເຫລົ່ານີ້ຄວນໄດ້ຮັບການປະເມີນໃນແງ່ທີ່ວ່າພຣະເຈົ້າຊົງສອນເຮົາຫຍັງແດ່ໃນພຣະຄຳພີ.

## ປະໂລຫິດ, ມະຫາປະໂລຫິດ

### ນິຍາມ

ໃນພະຄັມພີປະໂລຫິດເປັນຄົນທີ່ຖືກຮັບເລືອກໃຫ້ຖວາຍເຄື່ອງບູຊາແດ່ພະເຈົ້າໃນນາມຂອງປະຊາກອນຂອງພະເຈົ້າ "ຄວາມເປັນປະໂລຫິດ"
ເປັນຊື່ສຳລັບທີ່ເຮັດວຽກຫລືເງື່ອໄຂໃນການເປັນປະໂລຫິດ

- ໃນພັນທະສັນຍາເດີມພະເຈົ້າໄດ້ເລືອກອາໂຣນແລະລູກຫຼານຂອງທ່ານໃຫ້ເປັນປະໂລຫິດຂອງພະອົງສຳລັບປະຊາກອນອິດສະຣາເອນ
- "ຄວາມເປັນປະໂລຫິດ" ເປັນສິດແລະເປັນຄວາມຮັບຜິດຊອບທີ່ສືບທອດຈາກພໍ່ສູ່ບຸດໃນຕະກູນເລວີ
- ປະໂລຫິດອິດຣາເອນມີຄວາມຮັບຜິດຊອບທີ່ຕ້ອງຖວາຍເຄື່ອງບູຊາຂອງປະຊາຊົນຕໍ່ພະເຈົ້າ ພ້ອມກັບຫນ້າທີ່ອື່ນໆໃນພະວິຫານ
- ປະໂລຫິດຢັ່ງຖວາຍຄຳອະທິຖານປະຈຳແດ່ພະເຈົ້າໃນນາມຂອງປະຊາກອນຂອງພະອົງແລະປະກອບພິທີກຳອື່ນໆ ທາງສາດສະຫນາ
- ປະໂລຫິດເປ່ງສຽງອະທິຖານຕໍ່ພຣະເຈົ້າແກ່ປະຊາຊົນແລະສອນທຳມະບັນຍັດຂອງພະເຈົ້າໃຫ້ພວກເຂົາ.
- ໃນສະໄໝຂອງພະເຢຊູມີຣະດັບປະໂລຫິດທີ່ແຕກຕ່າງກັນ ທັ້ງຫມົດໄປເຖິງຫົວໜ້າປະໂລຫິດແລະມະຫາປະໂລຫິດ
- ພະເຢຊູຊົງເປັນ "ມະຫາປະໂລຫິດທີ່ຍິ່ງໃຫຍ່" ຂອງເຮົາ ຜູ້ຊົງວິງວອນເພື່ອເຮົາຕໍ່ພະພັກອົງພະເຈົ້າ
  ພະອົງຊົງຖວາຍຕົວຂອງພະອົງເປັນເຄື່ອງບູຊາສູງສຸດສຳລັບຄວາມບາບ
  ນີ້ໝາຍຄວາມວ່າເຄື່ອງບູຊາທີ່ເຮັດໂດຍປະໂລຫິດທີ່ເປັນມະນຸດບໍ່ຈຳເປັນອີກຕໍ່ໄປ
- ໃນພັນທະສັນຍາໃໝ່ ທຸກຄົນທີ່ເຊື່ອໃນພະເຢຊູຈະຖືກຮຽກວ່າ "ປະໂລຫິດ"
  ຜູ້ຊຶ່ງສາມາດມາເຖິງພະເຈົ້າໂດຍກົງໄດ້ດ້ວຍຄຳອະທິຖານເພື່ອຂໍຮ້ອງໃຫ້ກັບຕົວເອງແລະເພື່ອຄົນອື່ນດ້ວຍ


generated on Thu Jul 10 08:45:04 2025

- ໃນສະໄໝບູຮານມີປະໂລຫິດນອກສາດສະໜາຜູ້ຖວາຍເຄື່ອງບູຊາແດ່ພະເທັດເຊັ່ນພະບາອັນ

### ຄຳແນະນຳໃນການແປ

- ຂຶ້ນຢູ່ກັບເຣື່ອງຣາວ, ຄຳວ່າ "ປະໂລຫິດ" ສາມາດແປລວ່າ "ເຄື່ອງຖວາຍບູຊາທີ່ເປັນບຸກຄົນ" ຫລື "ຜູ້ນາງຂອງພະເຈົ້າ" ຫລື "ເຄື່ອງຖວາຍບູຊາຜູ້ນາງ" ຫລື "ບຸກຄົນທີ່ພະເຈົ້າຊົງແຕ່ງຕັ້ງເພື່ອເປັນຕົວແທນຂອງພະອົງ"
- ການແປຄຳວ່າ "ປະໂລຫິດ" ຄວນຈະແຕກຕ່າງຈາກຄຳວ່າ "ຄົນນາງ"
- ການແປບາງເທື່ອອາດຕ້ອງກ່າວເຖິງບາງສິ່ງເຊັ່ນ "ປະໂລຫິດຂອງອິດຣາເອນ" ຫລື "ປະໂລຫິດຂອງຊາວຢິວ" ຫລື "ປະໂລຫິດຂອງພະຢາເວ" ຫລື ປະໂລຫິດຂອງພະບາອັນ" ເພື່ອໃຫ້ຊັດເຈນວ່ານີ້ບໍ່ໄດ້ອ້າງເຖິງປະເພດຂອງປະໂລຫິດສະໄໝໃໝ່
- ຄຳທີ່ໃຊ້ແປວ່າ "ປະໂລຫິດ" ຄວນແຕກຕ່າງຈາກຄຳວ່າ "ຫົວໜ້າປະໂລຫິດ" ແລະ "ປະໂລຫິດຫຼວງ" ແລະ ເລວີ" ແລະ"ຜູ້ປະກາດພະທຳ"

## ປະກາດ ການປະກາດ

### ນິຍາມ

ຄຳວ່າ " ປະກາດ "ແລະ" ການປະກາດ" ເປັນ ການກ່າວເຖິງ ການປະກາດ ຢ່າງເປັນທາງການ ຫລືສາທາຣະນະ ຊຶ່ງມັກເນັ້ນເລື້ອງບາງຢ່າງ.

- "ການປະກາດ " ບໍ ພຽງແຕ່ ເນັ້ນຄວາມສຳຄັນ ຂອງສິ່ງທີ່ກຳລັງປະກາດ ແຕ່ກໍຍັງໃຫ້ຄວາມສຳຄັນ ກັບຜູ້ທີ່ປະກາດ.
- ຕົວຢ່າງ ,ໃນພັນທະສັນຍາເດີມ ຂ່າວສານ ຈາກພຣະເຈົ້າ ມັກນຳໜ້າດ້ວຍ " ການປະກາດຂອງພຣະເຈົ້າຢາເວ" ຫລື " ນີ້ຄືສິ່ງທີ່ພຣະເຈົ້າຢາເວໄດ້ເວົ້າໄວ້" ຄຳເວົ້ານີ ເນັ້ນໜັກ ກວ່າຄຳເວົ້ານີ້ເປັນຄຳເວົ້າ ຂອງພຣະເຈົ້າຢາເວເອງ ຄວາມຈິງທີ່ວ່າຂ່າວສານ ມາຈາກ ພຣະເຈົ້າຢາເວ ສແດງໃຫ້ເຫັນເຖິງຄວາມສຳຄັນຂອງຂ້ຄວາມນັ້ນ.

### ຄຳແນະນຳໃນການແປ

- "declare" ອາຈແປໄດ້ວ່າ ` ການປະກາດ"ຫລື "ປະກາດ ສາທາຣະນະ" ຫລື "ເວົ້າຢ່າງເຂັ້ມແຂງ " ຫລື "ເວົ້າຢ່າງໝັ້ນໃຈ" ທັ້ງນີ້ຂຶ້ນຢູ່ກັບບໍລິບົດ.
- ຄຳວ່າ " declaration" ກໍອາຈແປໄດ້ວ່າ " ຄຳຖະແຫລງການ " ຫລື " ຄຳປະກາດ."
- ຖ້ອຍຄຳນີ " ນີ້ຄືຄຳປະກາດຂອງພຣະເຈົ້າຢາເວ" ສາມາດແປໄດ້ວ່າ " ນີ້ຄືສິ່ງທີ່ພຣະເຈົ້າຢາເວປະກາດ ຫລື ນີ້ເປັນສິ່ງທີ່ພຣະເຈົ້າຢາເວກ່າວ.

## ປັດກວາດ,ໄດ້ກວາດລ້າງ

### ນິຍາມ

ຄຳວ່າ“ ປັດກວາດ” ແລະ“ ໄດ້ປັດກວາດລ້າງ”
ໝາຍເຖິງການເຄື່ອນໄຫວທີ່ກວ້າງຂວາງແລະວ່ອງໄວເພື່ອກຳຈັດຄວາມເປື້ອນໂດຍໃຊ້ຟອຍຫຼືແປງ.
ຄຳເຫຼົ່ານີ້ຍັງຖືກນຳໃຊ້ເປັນຄຳປຽບໄດ້ເຊັ່ນກັນ.

- ຄຳວ່າ "ປັດກວາດ" ຖືກໃຊ້ເປັນຕົວປຽບທຽບເພື່ອອະທິບາຍວິທີການໂຈມຕີຂອງກອງທັບທີ່ມີການເຄື່ອນໄຫວທີ່ວ່ອງໄວ, ມີຄວາມຕັດສິນໃຈທີ່ເດັດຂາດແລະກວ້າງຂວາງ.
- ຍົກຕົວຢ່າງ, ເອຊາຢາໄດ້ທຳນາຍໄວ້ວ່າຊາວອັດຊີເຣຍຈະ“ ກວາດລ້າງ” ອານາຈັກຢູດາ. ນີ້ໝາຍຄວາມວ່າພວກເຂົາຈະທຳລາຍຢູດາແລະຈັບປະຊາຊົນໄປ.
- ຄຳວ່າ "ກວາດລ້າງ" ຍັງຖືກປຽບທຽບໃຊ້ເພື່ອພັນລະນາເຖິງລັກສະນະຂອງນ້ຳທີ່ໄຫຼຢ່າງໄວວາ ຢູ້ດັນສິ່ງຕ່າງໆແລະບັງຄັບໃຫ້ພວກມັນອອກໄປ.
- ການມີບາງສິ່ງບາງຢ່າງ“ ຖືກກວາດລ້າງ” ຄົນໜຶ່ງ ໝາຍຄວາມວ່າສິ່ງທີ່ໜັກໜ່ວງແລະຫຍຸ້ງຍາກກຳລັງເກີດຂຶ້ນກັບລາວ.


generated on Thu Jul 10 08:45:04 2025

## ປັດດານ ອາຣໍາ

### ຂໍ້ເທັດຈິງ

ປັດດານ ອາຣໍາ ເປັນຊື່ແຄ້ວນນຶ່ງ ຊຶ່ງຄອບຄົວຂອງອັບຣາຮາມອາໃສ ຢູ່ກ່ອນທີ່ຈະອອກເດີນທາງ ໄປຍັງດິນແດນການາອານ ມີຄວາມໝາຍວ່າ ທົ່ງພຽງແຫ່ງອາຣໍາ.

- ເມືອງອັບບຣາຮາມ ໄດ້ຈາກເມືອງຮາຣານ ໃນ ປັດດານອາຣໍາເພື່ອເດີນທາງໄປຍັງດິນແດນ ການາອານນັ້ນ ຄອບຄົວໃຫຍ່ຂອງອັບ ຣາຮາມ ຍັງຄົງອາໃສຢູ່ທີ ຮາຣານ
- ຫຼາຍປີຕໍ່ມາ ຄົນຮັບໃຊ້ຂອງອັບຣາຮາມ ໄດ້ໄປທີ ປັດດານອາຣໍາເພື່ອຊອກຫາເມຍ ໃຫ້ກັບອີຊາກ ໃນຍາດຕິພີນ້ອງຂອງລາວ ຊຶ່ງອາໃສຢູ່ທີ່ນັ້ນ ແລະໄດ້ພົບກັບ ເຣເບກາ ຊຶ່ງເປັນຫຼານສາວຂອງເບທູເອັນ
- ບຸດຊາຍຂອງອີຊາກ ແລະ ເຣເບກາ ແມ່ນຢາໂຄບ ໄດ້ເດີນທາງໄປຍັງເມືອງປັດດານອາຣໍາ ແລະ ໄດ້ແຕ່ງງານ ກັບລູກສາວສອງຄົນຂອງລາບານ ນ້ອງຊາຍ ເຣເບກາ ຊຶ່ງອາໃສຢູ່ໃນເມືອງ ຮາຣານ
- ອາຣໍາ, ປັດດານອາຣໍາ, ແລະ ອາຣໍາ ນາຫາຣິອົມ ທຸກເມືອງເປັນແຄ້ວນດຽວກັນ ຊຶ່ງປະຈຸບັນ ເປັນທີ່ຕັ້ງຂອງປະເທດຊີເຣຍ

## ປັດສະຄາ

### ນິຍາມ

ຄໍາວ່າ "ປັດສະຄາ" ນັ້ນເປັນຊື່ຂອງເທດການທາງສາສະໜາຊຶ່ງຊາວຢິວສະເຫລີມສະຫລອງເປັນປະຈໍາທຸກປີ, ເພື່ອລະນຶກວ່າພະເຈົ້າຊົງຊ່ວຍກູ້ບັນພະບຸລຸດຂອງພວກເຂົາຊາວອິດສະຣາເອນໃຫ້ພົ້ນ,ຈາກການເປັນຂ້າທາດໃນເອຢິບໄດ້ ຢ່າງໃດ.

- ຊື່ຂອງເທດສະການຕາມຈິງແລ້ວມີທີ່ມາຈາກຂໍ້ແທ້ຈິງວ່າພຣະເຈົ້າຊົງ "ຜ່ານຂ້ວາມໄປ" ບ້ານທັ້ງຫຼາຍຂອງຊາວອິດສະລາເອນ ແລະບໍ່ໄດ້ປະຫານບຸດຊາຍຂອງຊາວອິດສະຣາເອນ ຕອນທີ່ພຣະອົງຊົງປະຫານບຸດຊາຍຫົວປີທຸກຄົນຂອງຊາວອີຢິບ.
- ການສະເຫລີມສະຫລອງເທດສະການປັດສະຄາທັ້ງໝົດໄປເຖິງອາຫານຄາບພິເສດຄືລູກແກະທີ່ປາສະຈາກຕໍາໜິຊຶ່ງພວກເຂົາໄດ້ຂ້າແລະອົບ, ເຊັ່ນດຽວກັບຂະໜົມປັ່ງທີ່ປາສະຈາກເຊື້ອແປ້ງ, ອາຫານເຫຼົ່ານີ້ເປັນທີ່ລະນຶກເຖິງຄາບອາຫານທີ່ຊາວອິດສະຣາເອນໄດ້ຮັບປະທານໃນຄືນກ່ອນທີ່ພວກທ່ານຈະໜີອອກຈາກອີຢິບ.
- ພຣະເຈົ້າຕັດສ່າວກັບຊາວອິດສະຣາເອນໃຫ້ຮັບປະທານອາຫານມື້ນີ້ທຸກປີເພື່ອລະນຶກແລະສະເຫລີມສະຫລອງທີ່ພຣະເຈົ້າໄດ້ "ຂ້ວາມຜ່ານ" ບ້ານຂອງພວກເຂົາໄປແລະເຮັດໃຫ້ພວກເຂົາເປັນອິດສະຫລະຈາກການເປັນຂ້າທາດໃນເອຢິບ.

### ຄໍາແນະນໍາໃນການແປ

- ຄໍາວ່າ "ປັດສະຄາ" ສາມາດແປໂດຍການນໍາເອົາສອງຄໍາມາລວມກັນນັ້ນຄືຄໍາວ່າ "ຜ່ານ" ແລະ "ຂ້ວາມ" ຫລືປະສົມກັບຄໍາອື່ນທີ່ມີຄວາມໝາຍແບບນີ.
- ຈະເປັນປະໂຫຍດຫຼາຍຫາກຊື່ຂອງເທດສະການນີ້ມີຄວາມເຊື່ອມຕໍ່ທີ່ຊັດແຈ້ງລະຫວ່າງຄໍາຊຶ່ງສາມາດໃຊ້ອະທິບາຍໄດ້ວ່າທູດຂອງອົງພຣະຜູ້ເປັນເຈົ້າໄດ້ຂ

## ປາກປະຕູ

### ນິຍາມ

ຄໍາວ່າ "ປາກປະຕູ" ອ້າງເຖິງສ່ວນທາງລຸ່ມຂອງປະຕູທາງເຂົ້າ ຫຼືສ່ວນໜຶ່ງຂອງອາຄານທີ່ຢູ່ຂ້າງໃນປະຕູ.

- ບາງເທື່ອປາກປະຕູເປັນໄມ້ທ່ອນຫຼືຫີນທີ່ຕ້ອງຍ່າງຂ້ວາມເພື່ອຈະເຂົ້າຫ້ອງຫຼືເຂົ້າໄປໃນອາຄານ.
- ທັ້ງປະຕູຮົ້ວແລະປະຕູເຂົ້າເຕັ້ນກໍສາມາດຈະມີປາກປະຕູ.
- ຄໍາສັບນີ້ຄວນຈະຖືກແປດ້ວຍຄໍາສັບໃນພາສາຂອງໂຄງການເຊິ່ງ ໝາຍເຖິງສະຖານທີ່ທີ່ທາງເຂົ້າເຮືອນທີ່ບຸກຄົນໃດໜຶ່ງຂ້ວາມໄປ.
- ຖ້າບໍ່ມີຄໍານີ "ປາກປະຕູ" ກໍສາມາດແປວ່າ "ທາງເຂົ້າປະຕູ" ຫຼື "ການເປີດ" ຫຼື "ທາງເຂົ້າ" ແລ້ວແຕ່ຊ່ວງເວລາ.

## ປາລານ

### ຂໍ້ເທັດຈິງ

ປາລານເປັນທະເລຊາຍຫຼືຖິ່ນທຸລະກັນດານທາງຕາເວັນອອກຂອງເອຢິບແລະດິນແດນທາງຕອນໃຕ້ຂອງການາອານ. ຍັງມີຜູເຂົ້າຊີປາລານເຊິ່ງອາດເປັນອີກຊື່ນຶ່ງຂອງຜູເຂົ້າຊິນາຍ.

- ສາວໃຊ້ຊື່ວ່າຮາກາແລະບຸດຊາຍຊື່ວ່າອິດສະມາເອວໄດ້ອອກໄປອາໃສຢູ່ໃນຖິ່ນແຫ້ງແລ້ງທຸລະກັນດານປາລານຫຼັງຈາກທີ່ນາງຊາລາໄດ້ສັ່ງໃຫ້ອັບລາຮາມ

ເມື່ອໂມເຊນຳຊາວພວກອິດສະລາເອນອອກມາຈາກເອຢິບນັ້ນ ພວກເຂົາໄດ້ເດີນທາງຜ່ານຖິ່ນທຸລະກັນດານແຫ່ງປາລານ.

- ຈາກຄາເດັດບາເນຍໃນຖິ່ນທຸລະກັນດານປາລານທີ່ໂມເຊໄດ້ສົ່ງຜູ້ຊາຍສິບສອງຄົນໄປສອດແນມດິນແດນການາອານແລະກັບມາລາຍງານ.
- ຖິ່ນທຸລະກັນດານຊິນ ເຊິ່ງຢູ່ທາງຕອນເໜືອຂອງປາລານແລະຖິ່ນທຸລະກັນດານຊີນຢູ່ທາງຕອນໃຕ້ຂອງປາລານ.

## ປິຕາຈານ

### ນິຍາມ

ຄຳວ່າ "ປິຕາຈານ " ໃນພັນທະສັນຍາເດີມອ້າງເຖິງບັນພະບຸລຸດຜູ້ກໍ່ຕັ້ງຊົນຊາດຍິວ ສະເພາະຢ່າງຍິ່ງອັບລາຮາມ ອີຊາກ ແລະຢາໂຄບ.

- ຄຳດັ້ງກ່າວໄດ້ອ້າງເຖິງບຸດຊາຍສິບສອງຄົນຂອງຢາໂຄບຊຶ່ງໄດ້ມາເປັນປິຕາຈານ ທັ້ງ 12 ເຜົ່າຂອງອິດສະລາເອນ.
- ຄຳວ່າ "ປິຕາຈານ " ມີຄວາມໝາຍຄືກັບຄຳວ່າ "ບັນພະບຸລຸດ"
  ແຕ່ອ້າງເຖິງເປັນພິເສດເຖິງຜູ້ຊາຍທີ່ເປັນຜູ້ນຳປິຕາຈານທີ່ເປັນທີ່ຮູ້ຈັກກັນດີຂອງກຸ່ມປະຊາຊົນ.

## ປິຕິຍິນດີ, ຄວາມຍິນດີ

### ນິຍາມ

ຄຳວ່າ“ ປິຕິຍິນດີ” ໝາຍຄວາມວ່າຈະເຕັ້ມໄປດ້ວຍຄວາມຍິນດີແລະຄວາມເບີກບານມ່ວນຊື່ນ.

- ຄຳສັບນີ້ມັກຈະໝາຍເຖິງການມີຄວາມສຸກຫລາຍກ່ຽວກັບສິ່ງດີໆທີ່ພຣະເຈົ້າໄດ້ເຮັດ.
- ມັນສາມາດຖືກແປເປັນ "ຍິນດີທີ່ສຸດ" ຫຼື "ດີໃຈຫລາຍ" ຫຼື "ເຕັ້ມໄປດ້ວຍຄວາມສຸກ".
- ເມື່ອມາຣີເວົ້າວ່າ, "ຈິດວິນຍານຂອງຂ້ອຍມີຄວາມປິຕິຍິນດີໃນພຣະເຈົ້າຜູ້ຊ່ອຍໃຫ້ລອດຂອງຂ້ອຍ" ນາງຫມາຍຄວາມວ່າ, "
  "ພຣະເຈົ້າຜູ້ຊ່ອຍໃຫ້ລອດຂອງຂ້ອຍໄດ້ເຮັດໃຫ້ຂ້ອຍມີຄວາມສຸກຫລາຍ" ຫລື
  "ຂ້ອຍຮູ້ສຶກມີຄວາມສຸກຫລາຍເພາະສິ່ງທີ່ພຣະເຈົ້າຜູ້ຊ່ອຍໃຫ້ລອດຂອງຂ້ອຍໄດ້ເຮັດເພື່ອຂ້ອຍ."

## ປີລາດ

### ຂ້ເທັດຈິງ

ປີລາດແມ່ນເຈົ້າເມືອງຂອງໂຣມໃນແຂວງຢູດາຍຊຶ່ງເປັນຜູ້ຕັດສິນປະຫານພຣະເຢຊູ

- ເນື່ອງຈາກປີລາດເປັນເຈົ້າເມືອງ ທ່ານຈຶ່ງມີອຳນາດໃນການສັ່ງຕັດສິນປະຫານບັນດາອາດຊະຍາກອນ
- ຜູ້ນຳທາງສາສະໜາຊາວຢິວຕ້ອງການໃຫ້ປີລາຕຶງພຣະເຢຊູເທິງກາງແຂນ
  ດັ່ງນັ້ນພວກທ່ານຈຶ່ງໄດ້ຕົວະວ່າພຣະເຢຊູເປັນອາດຊະຍາກອນ
- ປີລາດໄດ້ຄິດວ່າພຣະເຢຊູບໍ່ໄດ້ມີຄວາມຜິດ ແຕ່ທ່ານຢູ່ທ່າມກາງຝູງຊົນແລະຕ້ອງການເອົາໃຈຝູງຊົນ ດັ່ງນັ້ນປີລາດຈຶ່ງສັ່ງໃຫ້ທະຫານພ
  ຣະເຢຊູໂດຍເອົາໄປທີ່ໄມ້ກາງແຂນ

## ປຶ້ມບັນທຶກທະບຽນແຫ່ງມີຊີວິດ

### ນິຍາມ

ຄຳວ່າ“ ປຶ້ມແຫ່ງຊີວິດ” ໃຊ້ເພື່ອກ່າວເຖິງບ່ອນທີ່ພຣະເຈົ້າໄດ້ຂຽນຊື່ຂອງຄົນທັງໝົດທີ່ພຣະອົງໄດ້ໄຖ່ແລະໃຫ້ຊີວິດນິລັນດອນແກ່ເຂົາ.

- ການເປີດເຜີຍກ່າວເຖິງປຶ້ມຫົວນີ້ວ່າ "ປຶ້ມຊີວິດຂອງລູກແກະ." ນີ້ສາມາດຖືກແປວ່າ "ປຶ້ມບັນທຶກຂອງຊີວິດທີ່ເປັນຂອງພຣະເຢຊູ,
  ລູກແກະຂອງພຣະເຈົ້າ."
  ການເສຍສະລະຂອງພຣະເຢຊູຢູ່ເທິງໄມ້ກາງແຂນໄດ້ຈ່າຍຄ່າປັບໃໝສຳລັບບາບຂອງຜູ້ຄົນເພື່ອພວກເຂົາຈະມີຊີວິດນິລັນດອນໂດຍມີສັດທາໃນພຣະ
  ອົງ.
- ຄຳວ່າ "ປຶ້ມ" ຍັງສາມາດໝາຍຄວາມວ່າ "ເລື່ອນ" ຫລື "ຈົດ ໝາຍ" ຫລື "ຂຽນ" ຫລື "ເອກະສານນິຕິກຳ." ມັນອາດຈະເປັນຕົວ
  ໜັງສືຫລືຕົວເລກ.


generated on Thu Jul 10 08:45:04 2025

## ປຸກ, ເຕືອນ

### ນິຍາມ

ການປຸກແມ່ນການເຕືອນປະຊາຊົນເຖິງບາງສິ່ງທີ່ອາດເປັນອັນຕະລາຍຕໍ່ພວກເຂົາ. ການ "ຕື່ນຕົວ" ເປັນການວິຕົກກັງວົນແລະຢ້ານບາງສິ່ງທີ່ອັນຕະລາຍ ຫລືມາຮຸກຮານ.

- ກະສັດເຢໂຮຊາຟັດຕື່ນຕົວເມື່ອພຣະອົງຊົງໄດ້ຍິນວ່າຄົນໂມອາບໄດ້ກໍາລັງວາງແຜນທີ່ຈະໂຈມຕີອານາຈັກຢູດາ.
- ພຣະເຢຊູໄດ້ຊົງບອກພວກສາວົກຂອງພຣະອົງວ່າຢ່າຕົກໃຈເມື່ອພວກເຂົາໄດ້ຍິນເລື່ອງໄພວິບັດທີ່ຈະເກີດຂຶ້ນໃນວາລະສຸດທ້າຍ.
- ຄໍາວ່າ "ສຽງສຽງເຕືອນ"ໝາຍເຖິງການໃຫ້ຄໍາເຕືອນ. ໃນສະໄຫມບູຮານ, ຄົນສາມາດສຽງສຽງເຕືອນໄດ້ໂດຍການເຮັດສຽງດັງ.

### ຄໍາແນະນໍາໃນການແປ

- ການ "ເຕືອນບາງຄົນ" ໝາຍເຖິງ "ການເຮັດໃຫ້ບາງຄົນວິຕົກ" ຫລື "ບາງຄົນຕົກໃຈ."
- ການ "ຖືກຕັກເຕືອນ" ສາມາດແປໄດ້ວ່າ "ຖືກເຮັດໃຫ້ວິຕົກ" ຫລື "ຖືກເຮັດໃຫ້ຕື່ນຕົວ" ຫລື "ຖືກເຮັດໃຫ້ເກີດຄວາມຫ່ວງໃຍ."
- ຄໍາວ່າ "ສຽງສຽງເຕືອນ" ອາດແປໄດ້ອີກວ່າ "ການເຕືອນຢ່າງເປີດເຜີຍ" ຫລື "ປະກາດວ່າອັນຕະລາຍກໍາລັງໃກ້ເຂົ້າມາ" ເປົ່າແກເຂົ້າ ສັດເພື່ອເຕືອນເຖິງອັນຕະລາຍ."

(ເບິ່ງເພີ່ມເຕີມ: Jehoshaphat, Moab)

## ປູ່ຍ່າຕາຢາຍ,ບິດາ,ບັນພະບຸຣຸດ

### ນິຍາມ

ເມື່ອໃຊ້ຕິວອັກສອນ,ຄໍາວ່າ "ບິດາ" ອ້າງເຖິງຜູ້ປົກຄອງທີ່ເປັນຜູ້ຊາຍແຕ່ກໍມີລັກສະນະການໃຊ້ໃນແບບປຽບທຽບສໍາລັບຄໍານີ້ດ້ວຍ.

- ຄໍາວ່າ "ບິດາ" ແລະ "ບັນພະບຸລຸດ" ຫຼາຍຄັ້ງໃຊ້ເພື່ອກ່າວເຖິງບັນພະບຸລຸດຂອງຄົນໂດຍສະເພາະ ຫຼືກຸ່ມຄົນ ຄໍານີ້ສາມາດແປໄດ້ອີກວ່າ "ປູ່ຍ່າຕາຢາຍ" ຫຼື "ພໍ່ບັນພະບຸຣຸດ".
- ການສະແດງອອກ "ພໍ່ຂອງ" ສາມາດປຽບທຽບກ່າວເຖິງຄົນທີ່ເປັນຜູ້ນໍາກຸ່ມຂອງກຸ່ມຄົນທີ່ກ່ຽວຂ້ອງຫຼືແຫຼ່ງທີ່ມາຂອງບາງສິ່ງ. ຕົວຢ່າງເຊັ່ນ, ໃນປະຖົມມະການ ບົດທີ 4, "ພໍ່ຂອງທຸກຄົນທີ່ອາໃສຢູ່ໃນເຕັ້ນ," ສາມາດແປໄດ້ໄດ້ອີກວ່າ, "ຫົວໜ້າຕະກູນຂອງຄົນກຸ່ມທໍາອິດທີ່ອາໃສຢູ່ໃນເຕັ້ນ".
- ອັກຄະທູດໂປໂລປຽບທຽບຮຽກຕົວເອງວ່າ "ພໍ່" ຂອງຄົນເຫຼົ່ານັ້ນທີ່ເຂົາໄດ້ຊ່ວຍໃຫ້ມາເປັນຄຣິສະຕຽນໂດຍຜ່ານການແບ່ງປັນຂ່າວປະເສີດຂອງພວກເຂົາ.

### ຄໍາແນະນໍາການແປ

- ເມື່ອເວົ້າເຖິງບິດາແລະບຸດຊາຍຕາມຕົວອັກສອນຂອງເຂົາ, ຄໍານີ້ສາມາດແປໄດ້ອີກໂດຍການໃຊ້ຄໍາປົກກະຕິທີ່ບົ່ງບອກເຖິງບິດາໃນພາສານັ້ນ.
- "ພຣະເຈົ້າພຣະບິດາ" ຄວນແປດ້ວຍຄໍາທົ່ວໄປ ຫໍາມະດາເປັນຄໍາທີ່ໝາຍເຖິງ "ພໍ່".
- ເມື່ອບົ່ງບອກເຖິງບັນພະບຸຣຸດ ຄໍານີ້ສາມາດແປໄດ້ວ່າ "ບັນພະບຸຣຸດ" ຫຼື "ພໍ່ບັນພະບຸຣຸດ".
- ເມື່ອໂປໂລກ່າວເຖິງຕົວເອງໃນລັກສະນະປຽບທຽບໃນການເປັນບິດາແກ່ບັນດາຜູ້ສັດທາໃນພຣະຄຣິດນີ້ສາມາດແປໄດ້ວ່າ "ເປັນບິດາຝ່າຍວິນຍານ" ຫຼື "ບິດາໃນພຣະຄຣິດ".
- ບາງຄັ້ງຄໍາວ່າ "ບິດາ" ສາມາດແປໄດ້ອີກວ່າ "ຜູ້ນໍາຕະກູນ".
- ຄໍາເວົ້າທີ່ວ່າ "ບິດາຂອງການຕົວະທັ້ງຫຼາຍ"ສາມາດແປໄດ້ອີກວ່າ" ທີ່ມາຂອງການຕົວະທັ້ງຫຼາຍ" ຫຼື "ຜູ້ທີ່ເປັນທີ່ມາຂອງການຕົວະລ່ວງທັ້ງຫຼາຍ".

## ປົກຄອງ

### ນິຍາມ

ຄໍາ ວ່າ“ ປົກຄອງ” ໝາຍ ເຖິງການປົກຄອງເປັນກະສັດປົກຄອງປະຊາຊົນຂອງປະເທດໃດ ໜຶ່ງ ຫຼືອານາຈັກໃດ ໜຶ່ງ. ການປົກຄອງຂອງກະສັດແມ່ນໄລຍະເວລາທີ່ລາວ ກໍາ ລັງປົກຄອງຢູ່.

- ຄໍາວ່າ“ ການປົກຄອງຍັງຖືກໃຊ້ເພື່ອກ່າວເຖິງພະເຈົ້າທີ່ປົກຄອງເປັນກະສັດປົກຄອງທົ່ວໂລກ.
- ພຣະເຈົ້າອະນຸຍາດໃຫ້ກະສັດມະນຸດປົກຄອງອິສະຣາເອນໃນເວລາທີ່ພວກເຂົາປະຕິເສດລາວເປັນກະສັດຂອງພວກເຂົາ.


generated on Thu Jul 10 08:45:04 2025

- ເມື່ອພຣະເຢຊູຄຣິດກັບມາລາວຈະປົກຄອງຢ່າງເປີດເຜີຍເປັນກະສັດປົກຄອງທົ່ວໂລກແລະຄຣິດສະຕຽນຈະ"ຮ່ວມກັນກັບພຣະອົງ.
- ຄໍາສັບນີ້ຍັງສາມາດແປວ່າ "ກົດເກນຢ່າງແທ້ຈິງ" ຫຼື "ປົກຄອງແບບກະສັດ" ຫລື "ປົກຄອງເປັນກະສັດ."

## ປົດປ່ອຍ, ຜູ້ປົດປ່ອຍ, ການປົດປ່ອຍ

### ນິຍາມ

ການ “ປົດປ່ອຍ“ຜູ້ໃດຜູ້ໜຶ່ງໝາຍເຖິງການກູ້ເອົາຄົນນັ້ນ. ຄໍາວ່າ
“ຜູ້ປົດປ່ອຍ“ໝາຍເຖິງຜູ້ທີ່ກູ້ໄພຫລືປ່ອຍປະຊາຊົນອອກຈາກການເປັນຂ້າທາດ,ການກົດຂີ່ຂົ່ມເຫັງ, ຫລືຄວາມອັນຕະລາຍອື່ນໆ.ຄໍາວ່າ
“ການປົດປ່ອຍ“ໝາຍເຖິງສິ່ງທີ່ເກີດຂຶ້ນເມື່ອຜູ້ໃດຜູ້ໜຶ່ງຊ່ວຍຊີວິດຫລືປົດປ່ອຍປະຊາຊົນອອກຈາກການເປັນຂ້າທາດ,ການກົດຂີ່ຂົ່ມເຫັງ,
ຫລືຄວາມອັນຕະລາຍອື່ນໆ.

- ໃນພຣະຄໍາພີເດີມ,
  ພຣະເຈົ້າໄດ້ແຕ່ງຕັ້ງຜູ້ປົດປ່ອຍໃຫ້ປົກປ້ອງຊາວອິດສະຣາເອນໂດຍນໍາພາພວກເຂົາໄປສູ້ຮົບກັບກຸ່ມອື່ນໆທີ່ມາໂຈມຕີພວກເຂົາ.
- ຜູ້ປົດປ່ອຍເຫລົ່ານີ້ຖືກເອີ້ນວ່າ “ຜູ້ປົກຄອງ“
  ແລະພຣະທໍາຜູ້ປົກຄອງໃນພຣະຄໍາພີເດີມໄດ້ບັນທຶກເວລາໃນປະຫວັດສາດເມື່ອຜູ້ປົກຄອງເຫລົ່ານີ້ປົກຄອງອິດສະຣາເອນ.
- ພຣະເຈົ້າຍັງໄດ້ຖືກເອີ້ນວ່າເປັນ “ຜູ້ປົດປ່ອຍ.“ ຕະຫລອດປະຫວັດສາດຂອງອິດສະຣາເອນ,
  ພຣະອົງໄດ້ປົດປ່ອຍຫລືຊ່ວຍເຫລືອປະຊາຊົນຂອງພຣະອົງຈາກສັດຕູຂອງພວກເຂົາ.
- ຄໍາວ່າ “ມອບໃຫ້“ ຫລື “ມອບສິ່ງ“
  ມີຄວາມໝາຍທີ່ແຕກຕ່າງກັນຫລາຍໃນການມອບຄົນຕໍ່ສັດຕູ,ເຊັ່ນວ່າເມື່ອຢູດາໄດ້ມອບພຣະເຢຊູໃຫ້ພວກຜູ້ນໍາຊາວຢິວ.

### ຄໍາແນະນໍາ ໃນການແປ

- ໃນແງ່ຂອງການຊ່ວຍໃຫ້ປະຊາຊົນຫລຸດພົ້ນອອກຈາກສັດຕູຂອງພວກເຂົາ, ຄໍາວ່າ “ປົດປ່ອຍ“ສາມາດຖືກແປເປັນ “ກູ້ໄພ“ ຫລື
  “ປົດປ່ອຍ“ ຫລື “ຊ່ວຍໃຫ້ລອດ.“
- ເມື່ອໝາຍຄວາມວ່າຈະມອບຜູ້ໃດຜູ້ໜຶ່ງໃຫ້ສັດຕູ, ການມອບສິ່ງສາມາດແປເປັນ “ຫໍລະຍົດ“ຫລື “ມອບ“ຫລື “ມອບໃຫ້.“
- ຄໍາວ່າ “ຜູ້ປົດປ່ອຍ“ ຍັງສາມາດແປເປັນ “ຜູ້ກູ້ໄພ“ ຫລື “ຜູ້ປົດປ່ອຍໃຫ້ເປັນອິດສະຫລະ.“
- ເມື່ອຄໍາວ່າ “ຜູ້ປົດປ່ອຍ“ ໝາຍເຖິງຜູ້ປົກຄອງທີ່ນໍາພາອິດສະຣາເອນ,ມັນຍັງສາມາດແປເປັນ “ເຈົ້າແຂວງ“ ຫລື “ຜູ້ພິພາກສາ“ ຫລື
  “ຜູ້ນໍາ.“

## ປໍລະປັກ, ສັດຕູ

### ນິຍາມ

"ປໍລະປັກ" ຄືບຸກຄົນຫລືກຸ່ມບຸກຄົນທີ່ຕໍ່ຕ້ານບາງຄົນຫລືບາງສິ່ງ. ຄໍາວ່າ "ສັດຕູ" ມີຄວາມໝາຍຄ້າຍຄືກັນ.

- ປໍລະປັກອາດຈະເປັນບຸກຄົນທີ່ພະຍາຍາມຕໍ່ຕ້ານຫລືທໍາລາຍທ່ານ.
- ຊົນຊາດນຶ່ງອາດຖືກເອີ້ນວ່າເປັນ "ປໍລະປັກ" ໄດ້ເມື່ອພວກເຂົາຕໍ່ສູ້ກັບອີກຊົນຊາດນຶ່ງ.
- ໃນພຣະຄໍາພີ, ມານໄດ້ຖືກເອີ້ນວ່າເປັນ "ປໍລະປັກ" ແລະ "ສັດຕູ."
- ປໍລະປັກອາດແປໄດ້ອີກວ່າ "ຄູ່ປໍລະປັກ" ຫລື "ສັດຕູ" ແຕ່ເປັນຄໍາທີ່ແຂງກວ່າຄໍາວ່າປໍລະປັກ.

(ເບິ່ງເພີ່ມເຕີມ: Satan)

## ຜິດກົດຫມາຍ

### ນິຍາມ

ຄໍາວ່າ "ຜິດກົດໝາຍ" ແລະ "ບໍ່ຖືກຕ້ອງຕາມກົດໝາຍ" ຖືກໃຊ້ເພື່ອອະທິບາຍການກະທໍາທີ່ຜິດກົດໝາຍ

- ໃນພັນທະສັນຍາໃໝ່ ຄໍາວ່າ "ຜິດກົດໝາຍ" ບໍ່ໄດ້ໃຊ້ເພື່ອອ້າງເຖິງການລະເມີດກົດໝາຍຂອງພຣະເຈົ້າເທົ່ານັ້ນ,
  ແຕ່ຍັງໝາຍເຖິງການລະເມີດກົດໝາຍຂອງຊາວຢິວທີ່ມະນຸດແຕ່ງຕັ້ງຂຶ້ນດ້ວຍ.
- ໃນຊ່ວງຫລາຍປີທີ່ຜ່ານມາ, ຊາວຢິວໄດ້ເພີ່ມກົດໝາຍເຂົ້າມາອີກຈາກທີ່ພຣະເຈົ້າປະທານໃຫ້ແກ່ພວກເຂົາ. ຜູ້ນໍາຊາວຢິວຈະ
  ເອີ້ນສິ່ງທີ່ເພີ່ມເຂົ້າມານີ້ວ່າ "ຜິດກົດໝາຍ" ຖ້າມັນບໍ່ສອດຄ່ອງກັບກົດໝາຍທີ່ພວກເຂົາແຕ່ງຕັ້ງຂຶ້ນມາ.
- ເມື່ອພຣະເຢຊູກັບເຫລົ່າສາວົກຂອງພຣະອົງກໍາລັງເດັດຮວງເຂົ້າໃນວັນສະບາໂຕ, ພວກຟາຣີຊາຍໄດ້ກ່າວຫາວ່າເຮັດໃນສິ່ງ
  "ຜິດກົດໝາຍ" ເພາະກົດໝາຍຍິວຫ້າມບໍ່ໃຫ້ກະທໍາການໃດໆໃນວັນນັ້ນ.


generated on Thu Jul 10 08:45:04 2025

- ເມື່ອເປໂຕກ່າວວ່າ ການກິນອາຫານທີ່ເປັນມົນທິນ ເປັນການ "ຜິດພຣະບັນຍັດ" ສ່ຳຫລັບເຂົາ, ຊຶ່ງໝາຍຄວາມວ່າ ຖ້າເຂົາກິນອາຫານເຫລົ່ານັ້ນ
  ເຂົາກໍຈະທຳຜິດພຣະບັນຍັດຂອງພຣະເຈົ້າໄດ້ໃຫ້ໄວ້ກັບຊາວອິດສະຣາເອນທີ່ບໍ່ໃຫ້ກິນອາຫານທີ່ເປັນມົນທິນບາງຢ່າງ.

### ຄຳແນະນຳໃນການແປ

- ຄຳນີ້ຄວນໄດ້ຮັບການແປໂດຍໃຊ້ຄຳຫລືຫລ້ອຍຄຳຊຶ່ງໝາຍຄວາມວ່າ, " ບໍ່ຖືກຕ້ອງຕາມກົດໝາຍ ຫລື "ການຝ່າຝືນກົດໝາຍ."
- ການແປແບບອື່ນຂອງຄຳວ່າ "ຜິດກົດໝາຍ" ອາດເປັນ, "ບໍ່ອະນຸຍາດ" ຫລື "ບໍ່ເປັນໄປຕາມກົດໝາຍຂອງພຣະເຈົ້າ" ຫລື "ບໍ່ສອດຄ່ອງກັບກົດໝາຍຂອງເຮົາ."
- ຄຳກ່າວທີ່ວ່າ "ຝ່າຝືນກົດໝາຍ" ມີຄວາມໝາຍເຊັ່ນດຽວກັບ "ຜິດກົດຫມາຍ."

## ຜິດສິລະທັມທາງເພດ

### ນິຍາມ

ຄຳວ່າ "ຜິດສິລະທັມທາງເພດ" ກ່າວເຖິງກິດຈະກຳທາງເພດທີ່ເກີດຂຶ້ນນອກເໜືອຄວາມສຳພັນທາງການສົມລົດຂອງຜູ້ຊາຍກັບຜູ້ຍິງ.
ນີ້ເປັນການຕໍ່ຕ້ານແຜນການຂອງພຣະເຈົ້າ.ພຣະຄັມພີພາສາອັງກິດສະບັບເກົ່າເອີ້ນສິ່ງນີ້ວ່າ "ການລັກລອບໄດ້ເສັ່ຽກ່ອນການແຕ່ງງານ".

- ຄຳນີ້ສາມາດອ້າງເຖິງກິດຈະກຳທາງເພດໃດ ໆ ທີ່ຕໍ່ຕ້ານພຣະປະສົງພຣະເຈົ້າ,ລວມທັ້ງຮັກຮ່ວມເພດ ແລະການລາມົກ.
- ແບບນຶ່ງຂອງການຜິດສິລະທັມທາງເພດຄື ຫຼິ້ນຊູ້ ຊຶ່ງເປັນການກະທຳທາງເພດ,ໂດຍສະເພາະຢ່າງຍິ່ງ
  ລະຫວ່າງບຸກຄົນທີ່ແຕ່ງງານແລ້ວແລະບາງຄົນທີ່ບໍ່ແມ່ນຄູ່ຂອງບຸກຄົນນັ້ນ.
- ອີກແບບນຶ່ງຂອງການຜິດສິລະທັມທາງເພດກໍຄື "ໂສເພນີ," ຊຶ່ງກ່ຽວຂ້ອງກັບການຈ່າຍເງິນເພື່ອການມີເພດສຳພັນກັບບາງຄົນ.
- ຄຳນີ້ຍັງໃຊ້ໃນແບບປຽບທຽບທີ່ກ່າວເຖິງຄວາມບໍ່ສັດຊື່ຂອງອິສະຣາເອນຕໍ່ພຣະເຈົ້າດ້ວຍການທີ່ພວກເຂົາໄດ້ນະມັດສະການພຣະທຽມ.

### ຄຳແນະນຳໃນການແປ

- ຄຳວ່າ "ຜິດສິລະທັມທາງເພດ" ສາມາດແປໄດ້ວ່າ "ຜິດສິລະທັມ" ເຫົ່າເຖິງທີ່ມີຄວາມເຂົ້າໃຈໃນຄວາມໝາຍທີ່ຖືກຕ້ອງຂອງຄຳນັ້ນ.
- ອີກຢ່າງນຶ່ງໃນການແປຄຳນີ້ ສາມາດລວມເຖິງ "ການກະທຳທາງເພດທີ່ຜິດ" ຫຼື "ເພດສຳພັນນອກສົມຣົດ."
- ຄຳນີ້ຄວນແປແຕກຕ່າງໄປຈາກຄຳວ່າ "ຫຼິ້ນຊູ້".
- ການແປຄຳນີ້ໃນທາງປຽບທຽບ ຄວນຍັງຄົງຄວາມໝາຍຕາມຕົວອັກສອນເຫົ່າທີ່ທຳໄດ້ ມີການປຽບທຽບໃນພຣະຄັມພີ
  ລະຫວ່າງຄວາມບໍ່ສັດຊື່ຕໍ່ພຣະເຈົ້າ ແລະຄວາມບໍ່ສັດຊື່ໃນເລື່ອງຄວາມສຳພັນທາງເພດ.

## ຜີປີສາດ, ວິນຍານຊົ່ວ, ວິນຍານໂສໂຄກ

### ນິຍາມ

ຂໍ້ກຳນົດທັງໝົດນີ້ໝາຍເຖິງຜີປີສາດ, ຊຶ່ງແມ່ນວິນຍານທີ່ຂັດຂວາງພຣະປະສົງຂອງພຣະເຈົ້າ.

- ພຣະເຈົ້າໄດ້ສ້າງທູດສະຫວັນເພື່ອຮັບໃຊ້ພຣະອົງ.
  ເມື່ອຜີປີສາດໄດ້ກະບົດຕໍ່ພຣະເຈົ້າ.ພວກທູດສະຫວັນບາງສ່ວນກໍໄດ້ກະບົດແລະຖືກຂັບໄລ່ອອກຈາກສະຫວັນ.ເຊື່ອກັນວ່າຜີປີສາດແລະວິນຍານຊົ່ວແມ່ນ
  “ລົ້ມລົງເຫລົ່ານີ.“
- ບາງຄັ້ງຜີປີສາດເຫລົ່ານີ້ຖືກເອີ້ນວ່າ “ວິນຍານໂສໂຄກ“ ຄຳວ່າ “ໂສໂຄກ“ ມີຄວາມໝາຍວ່າ “ບໍ່ສະອາດ“ ຫລື “ຊົ່ວຮ້າຍ“ ຫລື
  “ບໍ່ບໍຣິສຸດ.“
- ເນື່ອງຈາກວ່າຜີປີສາດຮັບໃຊ້ມານ.ພວກມັນເຮັດສິ່ງຊົ່ວ.ບາງຄັ້ງພວກມັນອາໄສຢູ່ພາຍໃນຄົນແລະຄວບຄຸ່ມພວກເຂົາ.
- ຜີປີສາດແມ່ນມີອຳນາດຫລາຍກວ່າມະນຸດ,ແຕ່ບໍ່ມີອຳນາດຄືພຣະເຈົ້າ.

ຄຳແນະນຳ ໃນການແປ

- ຄຳວ່າ “ຜີປີສາດ“ ຍັງສາມາດແປເປັນ “ວິນຍານຊົ່ວ.“
- ຄຳວ່າ “ວິນຍານໂສໂຄກ“ ຍັງສາມາດແປໄດ້ວ່າ “ວິນຍານບໍ່ບໍສະອາດ“ ຫລື “ວິນຍານທີ່ເສື່ອມຊາມ“ຫລື “ວິນຍານຊົ່ວ.“
- ຕ້ອງໃຫ້ແນ່ໃຈວ່າຄຳສັບຫລືປະໂຫຍກທີ່ໃຊ້ໃນການແປຄຳສັບນີ້ແຕກຕ່າງຈາກຄຳທີ່ໃຊ້ໃນການອ້າງເຖິງມານ.
- ພິຈາລະນາຄຳວ່າ “ຜີປີສາດ“ ຖືກແປເປັນພາສາທ້ອງຖິ່ນຫລືປະເທດຊາດ.


generated on Thu Jul 10 08:45:04 2025

## ຜີເຂົ້າ

### ນິຍາມ

ຄົນຖືກຜີເຂົ້າ ມີຜີ ຫລື ວິນຍານຊົ່ວຮ້າຍ ທີ່ຄວບຄຸມ ສິ່ງທີ່ເຂົ້າເຮັດ ແລະ ຄິດ.

- ຫລາຍຄັ້ງ ທີ່ບຸກຄົນ ທີ່ຖືກຜີເຂົ້າ ຈະທຳຮ້າຍຕົວເອງ ຫລືຄົນອື່ນ ເພາະວ່າ ຜີຮ້າຍ ທີ່ເຮັດໃຫ້ເຂົ້າ ຕ້ອງເຮັດເຊັ່ນນັ້ນ.
- ພຣະເຢຊູ ຊົງໄດ້ຮັກສາ ຄົນທີ່ມີຜີເຂົ້າ ໂດຍການສັ່ງໃຫ້ຜີຮ້າຍ ອອກມາຈາກພວກເຂົາ ນີ້ມັກຈະເອີ້ນວ່າ "ຂັບໄລ່ຜີ" ອອກ.

### ຄຳແນະນຳໃນການແປ

- ວິທີອື່ນ ໃນການແປຄຳນີ ອາດລວມເຖິງ "ຜີຮ້າຍເຂົ້າຄວບຄຸມ" ຫລື "ຖືກຄວບຄຸມໂດຍວິນຍານຊົ່ວ" ຫລື "ມີວິນຍານຊົ່ວຮ້າຍ ອາໄສຢູ່ພາຍໃນ."

## ຜູກມັດ, ຜູກພັນ, ຜູກ

### ນິຍາມ

ຄຳວ່າ“ ຜູກມັດ” ໝາຍຄວາມວ່າຈະມັດສິ່ງໃດໜຶ່ງຫຼືຖຶມັນໄວ້ຢ່າງໝັ້ນຄົງ. ບາງສິ່ງບາງຢ່າງທີ່ຖືກຜູກມັດຫລືເຂົ້າກັນຖືກເອີ້ນວ່າ“ ຄວາມຜູກພັນ”. ຄຳ ວ່າ“ ຜູກມັດ” ແມ່ນຄວາມເຄັ່ງຕຶງທີ່ຜ່ານມາຂອງຄຳນີ.

- ການຖືກ“ ຜູກມັດ” ໝາຍຄວາມວ່າມີສິ່ງໃດສິ່ງໜຶ່ງທີ່ມັດຫລືມັດໄວ້ໃນສິ່ງອື່ນ.
- ໃນແງ່ມຸມມອງ, ບຸກຄົນສາມາດ "ຜູກມັດ" ກັບຄຳປະຕິຍານ, ຊຶ່ງຫມາຍຄວາມວ່າລາວຕ້ອງການ "ປະຕິບັດ" ສິ່ງທີ່ລາວສັນຍາໄວ້.
- ຄຳວ່າ“ ຜູກພັນພັນ” ໝາຍເຖິງສິ່ງໃດທີ່ຜູກມັດ, ກັກຂັງ, ຫລືໃສ່ໂທດຜູ້ໃດຜູ້ໜຶ່ງ.
  ປົກກະຕິແລ້ວມັນໝາຍເຖິງຕ່ອງໂສ້ກາຍະພາບ,ຫລືເຊືອກທີ່ເຮັດໃຫ້ຄົນບໍ່ເປັນອິດສະຫຼະໃນການເຄື່ອນຍ້າຍ.
- ໃນສະໄໝທີ່ຂຽນພຣະຄຳພີ, ສາຍເຊືອກເຊັ່ນ: ສາຍເຊືອກຫລືໂສ້ຖືກໃຊ້ເພື່ອຕິດກັບນົກໂທດໃສ່ຝ່າຫລືພືນຂອງຄຸກກ້ອນຫີນ.
- ຄຳວ່າ“ ຜູກມັດ” ຍັງສາມາດໃຊ້ເວົ້າກ່ຽວກັບການຫໍ່ຜ້າອ້ອມໆບາດເພື່ອຊ່ວຍຮັກສາໃຫ້ຫາຍດີ
- ຄົນທີ່ຕາຍແລ້ວຈະຖືກມັດໄວ້ດ້ວຍຜ້າເພື່ອຕຽມການຝັງ.
- ຄຳວ່າ“ ຄວາມຜູກພັນ” ຖືກໃຊ້ເປັນຕົວເລກເພື່ອກ່າວເຖິງບາງສິ່ງບາງຢ່າງ, ເຊັ່ນວ່າບາບ, ເຊິ່ງຄວບຄຸມຫລືເປັນທາດຂອງໃຜຜູ້ ໜຶ່ງ.
- ຄວາມຜູກພັນຍັງສາມາດເປັນຄວາມສຳພັນທີ່ໃກ້ຊິດລະ ຫວ່າງ ຄົນທີ່ພວກເຂົາສະໜັບສະໜູນ ເຊິ່ງກັນແລະກັນທາງດ້ານອາລົມ, ຈິດໃຈແລະຮ່າງກາຍ. ນີ້ໃຊ້ໄດ້ກັບຄວາມຜູກພັນຂອງການແຕ່ງງານ.
- ຍົກຕົວຢ່າງ, ສາມີແລະພັນລະຍາຖືກ“ ຜູກມັດ” ຫລືຜູກມັດເຊິ່ງກັນແລະກັນ.
  ມັນແມ່ນຄວາມຜູກພັນທີ່ພຣະເຈົ້າບໍ່ຕ້ອງການໃຫ້ແຕກແຍກ.

### ຄຳແນະນຳໃນການແປ

- ຄຳວ່າ“ ຜູກມັດ” ຍັງສາມາດແປເປັນ“ ເຊືອກ” ຫລື“ ຜູກມັດ” ຫລື“ ຫໍ່

## ຜູ້ກະບົດ, ການກະບົດ, ການທໍລະຍົດ

### ນິຍາມ

ຄຳ ວ່າ“ ກະບົດ” ໝາຍ ເຖິງການປະຕິເສດທີ່ຈະຍອມຢູ່ໃຕ້ ອຳ ນາດຂອງຜູ້ໃດຜູ້ ນຶ່ງ. ຄົນທີ່ "ກະບົດ" ມັກຈະບໍ່ເຊື່ອຟັງແລະເຮັດສິ່ງທີ່ຊົ່ວ. ບຸກຄົນປະເພດນີ້ຖືກເອີ້ນວ່າ "ຜູ້ກໍ່ການກະບົດ."

- ຄົນຜູ້ໜຶ່ງກຳລັງກະບົດເມື່ອລາວເຮັດບາງສິ່ງທີ່ເຈົ້າໜ້າທີ່ປົກຄອງລາວໄດ້ບອກລາວວ່າຢ່າເຮັດ.
- ບຸກຄົນຍັງສາມາດຄຶດຄ້ານໂດຍການປະຕິເສດສິ່ງທີ່ເຈົ້າໜ້າທີ່ໄດ້ສັ່ງໃຫ້ເຮັດ.
- ບາງຄັ້ງ ປະຊາຊົນກະບົດຕໍ່ຕ້ານລັດຖະບານຫຼືຜູ້ນຳຂອງພວກເຂົາທີ ກຳ ລັງປົກຄອງເໜືອພວກເຂົາ.
- ຄຳວ່າ "ກໍ່ກະບົດ" ຍັງສາມາດຖືກແປວ່າ "ບໍ່ເຊື່ອຟັງ" ຫຼື "ກໍ່ການຈາລະຈົນ", ຂຶ້ນຢູ່ກັບບໍ່ຣິບົດ.
- ຄຳວ່າ"ກໍ່ການຈາລະຈົນ" ຍັງສາມາດຖືກແປວ່າ "ບໍ່ເຊື່ອຟັງຢ່າງຕໍ່ເນື່ອງ" ຫຼື "ປະຕິເສດທີ່ຈະເຊື່ອຟັງ."
- ຄຳວ່າ "ການກໍ່ກະບົດ" ໝາຍ ຄວາມວ່າ "ການປະຕິເສດທີ່ຈະເຊື່ອຟັງ" ຫຼື "ການບໍ່ເຊື່ອຟັງ" ຫຼື "ການລະເມີດກົດ ໝາຍ".
- ປະໂຫຍກທີ່ວ່າ "ການກໍ່ກະບົດ" ຫຼື "ການກະບົດ" ຍັງສາມາດ ໝາຍ
  ເຖິງກຸ່ມຄົນທີ່ມີການຈັດຕັ້ງທີ່ກະບົດຕໍ່ຜູ້ມີອຳນາດທີ່ປົກຄອງໂດຍການລະເມີດກົດ ໝາຍ ແລະໂຈມຕີຜູ້ນຳແລະປະຊາຊົນອື່ນໆ.
  ຫຼາຍໆຄັ້ງ ພວກເຂົາພະຍາຍາມໃຫ້ຄົນອື່ນເຂົ້າຮ່ວມໃນການກະບົດດ້ວຍ.
- (ເບິ່ງເພີ່ມເຕີມ: ສີດອຳນາດ · ເຈົ້າແຂວງ)


generated on Thu Jul 10 08:45:04 2025

## ຜູ້ຈັດການ, ຄົນຕົ້ນເຮືອນ

### ນິຍາມ

ຄຳວ່າ "ຜູ້ຈັດການ" ຫຼື "ຄົນຕົ້ນເຮືອນ"
ໃນພຣະຄຳພີອ້າງເຖິງຜູ້ຮັບໃຊ້ທີ່ໄດ້ຮັບມອບໝາຍດ້ວຍຄວາມໄວ້ວາງໃຈເພື່ອໃຫ້ດູແລຊັບສົມບັດຂອງເຈົ້ານາຍແລະຈັດການທຸລະກິດຕ່າງໆ.

- ຄົນຕົ້ນເຮືອນໄດ້ຮັບມອບໝ້າທີ່ຄວາມຮັບຜິດຊອບຫຼວງຫຼາຍຊຶ່ງລວມເຖິງການປົກຄອງດູແລການງານຂອງຜູ້ຮັບໃຊ້ຄົນອື່ນໆ.
- ຄຳວ່າ "ຜູ້ຈັດການ"
  ເປັນຄຳທີ່ທັນສະໄໝຫຼາຍກ່ວາຄົນຕົ້ນເຮືອນ,ທັ້ງສອງຄຳນີ້ອ້າງເຖິງບາງຄົນທີ່ຈັດການດູແລແລະກິດຈະການງານຂອງຄົນອື່ນ.

### ຄຳແນະນຳໃນການແປ

- ຄຳນີ້ສາມາດແປວ່າ "ຜູ້ຄວບຄຸມດູແລ" ຫຼື "ຜູ້ຈັດລະບຽບບ້ານທັ້ງໝົດ" ຫຼື "ຜູ້ຮັບໃຊ້ທີ່ຈັດການ" ຫຼື "ບຸກຄົນທີ່ຈັດລະບຽບ."

## ຜູ້ຊາຍຂອງພຣະເຈົ້າ

### ຂໍ້ເທັດຈິງ

ຄຳກ່າວ "ຜູ້ຊາຍຂອງພຣະເຈົ້າ" ເປັນການກ່າວດ້ວຍຄວາມເຄົາລົບເຖິງຜູ້ປະກາດພຣະວັດຈະນະຂອງພຣະຢາເວ.
ນີ້ໄດ້ໃຊ້ເພື່ອອ້າງເຖິງທູດສະຫວັນຂອງພຣະຢາເວ.

- ເມື່ອອ້າງເຖິງຜູ້ປະກາດພຣະທັມ,ນີ້ສາມາດແປວ່າ "ຜູ້ຊາຍທີ່ເປັນຂອງພຣະເຈົ້າ" ຫຼື "ຜູ້ຊາຍຜູ້ທີ່ຮັບໃຊ້ພຣະເຈົ້າ."
- ເມື່ອອ້າງເຖິງທູດສະຫວັນ ນີ້ສາມາດແປໄດ້ວ່າ "ຜູ້ສົ່ງຂ່າວຂອງພຣະເຈົ້າ" ຫຼື "ທູດສະຫວັນຂອງທ່ານ" ຫຼື
  "ຊາວສະຫວັນຈາກພຣະເຈົ້າຜູ້ທີ່ເບິ່ງແລ້ວເໝືອນຜູ້ຊາຍຄົນໜຶ່ງ."

## ຜູ້ຊາຍທີ່ຮຽນຮູ້, ນັກໂຫລາສາດ

### ນິຍາມ

ໃນເນື້ອເລື່ອງພຣະຄຳພີມັດທາຍກ່ຽວກັບການກຳເນີດຂອງພຣະເຢຊູຄຣິດ " ໂຫລາຈານ " ເຫຼົ່ານີ້ ຫຼື " ຜູ້ຊາຍທີ່ຮຽນຮູ້ " ເຫຼົ່ານີ້ແມ່ນ "
ຜູ້ທີ່ມີປັນຍາ " ຜູ້ທີ່ໄດ້ນຳຂອງຂັວນມາມອບໃຫ້ກັບພຣະເຢຊູໃນເມືອງເບຣເລເຮັມຫຼັງຈາກທີ່ພຣະອົງກຳເນີດໃນທີ່ນັ້ນ ພວກເຂົາອາດເປັນ "
ນັກໂຫລາສາດ " ເຊິ່ງເປັນພວກທີ່ສຶກສາກ່ຽວກັບດວງດາວທັ້ງຫຼາຍ.

- ພວກຜູ້ຊາຍເຫຼົ່ານີ້ໄດ້ເດີນທາງເປັນໄລຍະທາງໄກຈາກປະເທດທາງທິດຕາເວັນອອກຂອງອິດສະເອນບໍ່ເປັນທີ່ຮູ້ຈັກກັນແບບແນ່ນອນວ່າພວກເຂົາຈາກມາແຕ່ສ
  ຫຼື ພວກເຂົາເປັນໃຜ ແຕ່ພວກເຂົາເປັນຜູ້ຊາຍທີ່ຮຽນຮູ້ຜູ້ທີ່ໄດ້ສຶກສາກ່ຽວກັບດວງດາວຕ່າງໆ.
- ພວກເຂົາອາດຈະສືບເຊື້ອສາຍມາຈາກພວກໂຫລາຈານທີ່ໄດ້ຮັບໃຊ້ໃນບາບີໂລນໃນສະໄໝຂອງດານີເອນ ແລະ
  ເປັນຜູ້ທີ່ໄດ້ຮັບການຝຶກອົບຮົມໃນຫຼາຍສິ່ງຫຼາຍຢ່າງ ລວມເຖິງການສຶກສາດວງດາວ ແລະ ການທຳນວຍຝັນ.
- ຕາມປະເພນີມັກຈະເວົ້າເຖິງກັນວ່າ ຜູ້ຊາຍທີ່ສະຫລາດ ແລະ ຜູ້ຊາຍທີ່ຮຽນຮູ້
  ເພາະວ່າມີຂອງຂັວນສາມອັນທີ່ພວກເຂົານຳມາມອບຖວາຍໃຫ້ກັບພຣະເຢຊູ ແນວໃດກໍ່ຕາມ ພຣະຄຳພີບໍ່ໄດ້ເວົ້າວ່າພວກເຂົາມີຈັກຄົນ.

## ຜູ້ດູແລ

### ນິຍາມ

ຄຳວ່າ "ຜູ້ດູແລ" ອ້າງເຖິງບຸກຄົນ ຊຶ່ງມີໜ້າທີ່ຮັບຜິດຊອບ ໃນງານ ແລະ ທຸກສຸກຂອງຄົນອື່ນ.

- ໃນພັນທະສັນຍາເດີມ, ຜູ້ດູແລມີໜ້າທີ່ ສ້າງຄວາມໜັ້ນໃຈວ່າ ຄົນງານພາຍໃຕ້ການດູແລ ຂອງຕົນ ນັ້ນໄດ້ເຮັດໜ້າທີ່ຂອງຕົນຢ່າງດີ.
- ໃນພັນທະສັນຍາໃໝ່, ຄຳນີ້ຖືກໃຊ້ ເພື່ອອະທິບາຍເຖິງ ຜູ້ນຳຄຣິດສະຕະຈັກ ໃນຍຸກທຳອິດ. ງານຂອງຜູ້ນຳ ຄືການດູແລຄວາມຈຳເປັນ
  ຝ່າຍຈິດວິນຍານຂອງຄຣິສຕະຈັກ, ເຮັດໃຫ້ແນ່ໃຈວ່າຜູ້ເຊື່ອ ໄດ້ຮັບການສັ່ງສອນ ທີ່ຖືກຕ້ອງຕາມຫລັກ ພຣະຄັມພີ.
- ໂປໂລ ອ້າງເຖິງຜູ້ດູແລວ່າ ເປັນເໝືອນກັບຜູ້ລ້ຽງແກະ ຜູ້ທີ່ດູແລ ຜູ້ເຊື່ອຂອງຕົນ ໃນຄຣິສຕະຈັກທ້ອງຖິ່ນ, ພວກເຂົາເປັນ "ຝູງແກະ"
  ຂອງທ່ານ.
- ຜູ້ດູແລ, ເໝືອນກັບຜູ້ລ້ຽງແກະ, ເຝົ້າດູແລ ຝູງແກະ. ເຂົາຄອຍຖ້າປົກປ້ອງ ແລະ ປ້ອງກັນ ຜູ້ເຊື່ອ ທັ້ງຫລາຍ
  ຈາກຄຳສອນຝ່າຍຈິດວິນຍານ ທີ່ປອມ ແລະ ອິດທິພົນຊົ່ວຮ້າຍອື່ນໆ.


generated on Thu Jul 10 08:45:04 2025

- ໃນພັນທະສັນຍາໃໝ່, ຄຳວ່າ "ຜູ້ດູແລ," "ຜູ້ປົກຄອງ," ແລະ"ຜູ້ລ້ຽງແກະ/ສິດຍາພິບານ" ນັ້ນ ຕ່າງເປັນຄຳ ທີ່ອ້າງເຖິງຜູ້ນຳຝ່າຍຈິດວິນຍານຄືກັນ.

### ຄຳແນະນຳໃນການແປ

- ວິທີອື່ນໃນການແປຄຳນີ້ ສາມາດແປວ່າ, "ຜູ້ຄວບຄຸມ ດູແລ" ຫລື "ຜູ້ດູແລ" ຫລື "ຜູ້ຈັດການ."
- ເມື່ອອ້າງເຖິງ ຜູ້ນຳກຸ່ມຄົນ ຂອງປະຊາກອນ ຂອງພຣະເຈົ້າລະດັບທ້ອງຖິ່ນນັ້ນ, ສາມາດແປດ້ວຍຄຳ ຫລືຄຳເວົ້າ ທີ່ມີຄວາມຫມາຍວ່າ, "ຜູ້ດູແລ ຝ່າຍຈິດວິນຍານ" ຫລື "ຜູ້ຊຶ່ງດູແລຄວາມຕ້ອງ ການ ຝ່າຍຈິດວິນຍານ ຂອງກຸ່ມຜູ້ເຊື່ອ" ຫລື "ບຸກຄົນ ຊຶ່ງດູແລ ຄວາມຕ້ອງການ ຝ່າຍຈິດວິນຍານຂອງຄຣິສຕະຈັກ."

## ຜູ້ທຳລາຍ

### ນິຍາມ

ຄຳວ່າ "ຜູ້ທຳລາຍ" ຕາມຕົວອັກສອນຫມາຍເຖິງ "ຄົນທີ່ທຳລາຍ"

- ຄຳນີ້ ມັກໃຊ້ໃນພັນທະສັນຍາເດີມ ເປັນຄຳອ້າງອີງ ຫົວໄປ ສຳຫລັບ ທຸກຄົນທີ່ທຳລາຍຄົນອື່ນ ເຊັ່ນ ກອງທັບທີ່ບຸກລຸກ.
- ເມື່ອພຣະເຈົ້າ ຊົງໄດ້ສົ່ງທູດສະຫວັນ ເພື່ອຂ້າບັນດາລູກຊາຍຫົວປີ ໃນປະເທດເອຢິບ ທູດສະຫວັນນັ້ນຖືກເອີ້ນວ່າ "ຜູ້ທຳລາຍລູກຊາຍຫົວປີ" ນີ້ອາດແປໄດ້ວ່າ "ຄົນນັ້ນ"ຫລືທູດສະຫວັນ" ທີ່ຂ້າລູກຊາຍຫົວປີ".
- ໃນພຣະທັມພຣະນິມິດ ກ່ຽວກັບເວລາສຸດທ້າຍ ຊາຕານຫລື ວິນຍານຊົ່ວ ອື່ນໆ ຖືກເອີ້ນວ່າ"ຜູ້ຂ້າຄົນ" ເຂົາເປັນຄົນທຳລາຍ"

ເພາະເປົ້າຫມາຍຂອງເຂົາ ຄື ການທຳລາຍ ແລະ ທຸກສິ່ງ ທີ່ພຣະເຈົ້າຊົງສ້າງຂຶ້ນໃຫ້ ເສື່ອມສະຫລາຍ.

## ຜູ້ທີ່ຖືກເລືອກ, ໄດ້ຖືກເລືອກ, ປະຊາຊົນຜູ້ທີ່ຖືກເລືອກ, ຜູ້ທີ່ຖືກເລືອກ, ຜູ້ທີ່ຖືກຄັດເລືອກ

### ນິຍາມ

ຄຳວ່າ, "ຜູ້ທີ່ຖືກຄັດເລືອກ" ຕາມຕົວອັກສອນໝາຍເຖິງ "ຜູ້ທີ່ຖືກເລືອກ"
ແລະເວົ້າເຖິງຄົນທັງຫລາຍທີ່ພຣະເຈົ້າໄດ້ແຕ່ງຕັ້ງໃຫ້ເປັນໄພ່ພົນຂອງພຣະອົງ. "ຜູ້ໄດ້ຖືກເລືອກ" ຫລື "ຜູ້ທີ່ຖືກເລືອກຂອງພຣະເຈົ້າ" ແມ່ນຄຳນຳໜ້າຊື່ທີ່ເວົ້າເຖິງພຣະເຢຊູ, ຜູ້ທີ່ຖືກເລືອກເປັນພຣະເມຊີອາ.

- ຄຳວ່າ "ຖືກເລືອກ" ໝາຍເຖິງເລືອກບາງສິ່ງຫລືບາງຄົນຫລືຕັດສິນໃຈບາງສິ່ງ.
  ຫລາຍເທື່ອມັກໃຊ້ເວົ້າເຖິງພຣະເຈົ້າທີ່ໄດ້ແຕ່ງຕັ້ງໄພ່ພົນໃຫ້ເປັນຂອງພຣະອົງແລະຮັບໃຊ້ພຣະອົງ.
- ໄດ້ຮັບການຖືກ "ເລືອກ" ໝາຍຄວາມວ່າໄດ້ຮັບການຖືກ "ຄັດເລືອກ" ຫລື "ແຕ່ງຕັ້ງ" ເພື່ອເປັນຫລືເພື່ອເຮັດບາງສິ່ງ.
- ພຣະເຈົ້າໄດ້ເລືອກປະຊາຊົນໃຫ້ບໍຣິສຸດ, ແຍກອອກໄວ້ຕ່າງຫາກໂດຍພຣະອົງ ເພື່ອຈຸດປະສົງໃຫ້ເກີດຜົນດີຝ່າຍວິນຍານ.
  ນັ້ນແມ່ນເຫດຜົນວ່າເປັນຫຍັງຄົນເຫລົ່ານັ້ນຈຶ່ງຖືກເອີ້ນວ່າ "ຜູ້ທີ່ໄດ້ຖືກເລືອກ" ຫລື "ຜູ້ທີ່ຖືກຄັດເລືອກ."
- ຄຳວ່າ "ຜູ້ທີ່ໄດ້ຮັບເລືອກ" ບາງເທື່ອໃຊ້ໃນພຣະຄຳພີເພື່ອເວົ້າເຖິງຄົນສະເພາະບາງກຸ່ມເຊັ່ນ ໂມເຊ ແລະ ກະສັດດາວິດ
  ຜູ້ທີ່ພຣະເຈົ້າໄດ້ແຕ່ງຕັ້ງໃຫ້ເປັນຜູ້ນຳໄພ່ພົນຂອງພຣະອົງ.
  ແລະຍັງໃຊ້ເວົ້າເຖິງຊົນຊາດອິດສະຣາເອນວ່າເປັນໄພ່ພົນທີ່ພຣະເຈົ້າໄດ້ເລືອກ.
- ຄຳຍ່ອຍຄຳທີ່ວ່າ "ຜູ້ທີ່ຖືກຄັດເລືອກ" ເປັນຄຳເວົ້າເກົ່າທີ່ມີຄວາມໝາຍຕາມຕົວອັກສອນວ່າ "ຜູ້ທີ່ໄດ້ຮັບເລືອກ" ຫລື "ໄພ່ພົນທີ່ໄດ້ຮັບການເລືອກ." ຄຳຍ່ອຍຄຳນີ້ໃນພາສາເດີມໃຊ້ກັບຈຳນວນສອງຄົນຂຶ້ນໄປເມື່ອເວົ້າເຖິງຜູ້ທີ່ມີຄວາມເຊື່ອໃນພຣະຄຣິດ.
- ໃນພຣະຄຳພີພາສາອັງກິດເຫລັ້ມເກົ່າ, ຄຳວ່າ "ຄັດເລືອກ" ໃຊ້ທັ້ງໃນພຣະຄຳພີເດີມແລະພຣະຄຳພີໃໝ່ທີ່ຈະແປວ່າ "ຜູ້ທີ່ໄດ້ຮັບເລືອກ" ພຣະຄຳພີເຫລັ້ມສະໄໝໃໝ່ໃຊ້ຄຳວ່າ "ຄັດເລືອກ" ໃນພັນທະສັນຍາໃໝ່ເທົ່ານັ້ນ,
  ທີ່ເວົ້າເຖິງໄພ່ພົນຜູ້ຊຶ່ງໄດ້ຮັບຄວາມພົ້ນໂດຍພຣະເຈົ້າຜ່ານທາງຄວາມເຊື່ອໃນພຣະເຢຊູ. ຕາມທີ່ເຫັນຫລາຍບ່ອນໃນພຣະຄຳພີ,
  ໄດ້ແປຄຳນີ້ສ່ວນຫລາຍຈະແປຕາມຕົວອັກສອນວ່າ "ຜູ້ທີ່ໄດ້ຮັບເລືອກ."

### ຄຳແນະນຳໃນການແປ

- ເປັນການດີທີ່ສຸດຖ້າຫາກແປວ່າ "ຄັດເລືອກ" ດ້ວຍຄຳຫລືຄຸ້ຍຄຳທີ່ໝາຍຄວາມວ່າ "ຜູ້ທີ່ໄດ້ຮັບເລືອກ" ຫລື "ໄພ່ພົນທີ່ໄດ້ຮັບເລືອກ."
  ທີ່ເວົ້າມານີ້ສາມາດແປໄດ້ອີກວ່າ "ໄພ່ພົນຜູ້ທີ່ພຣະເຈົ້າເລືອກ" ຫລື "ຜູ້ທີ່ພຣະເຈົ້າໄດ້ແຕ່ງຕັ້ງໃຫ້ເປັນໄພ່ພົນຂອງພຣະອົງ."
- ຄຳຍ່ອຍຄຳທີ່ວ່າ, "ຜູ້ທີ່ຖືກເລືອກ" ສາມາດແປໄດ້ອີກຢ່າງໜຶ່ງວ່າ "ຜູ້ທີ່ພຣະເຈົ້າໄດ້ແຕ່ງຕັ້ງ" ຫລື "ຜູ້ທີ່ຖືກຄັດເລືອກ."
- "ເຮົາເລືອກເຈົ້າ" ສາມາດແປໄດ້ວ່າ, "ເຮົາໄດ້ແຕ່ງຕັ້ງເຈົ້າ" ຫລື "ເຮົາຄັດເລືອກເຈົ້າ."
- ໃນການເວົ້າເຖິງພຣະເຢຊູວ່າເປັນ, "ຜູ້ໄດ້ຮັບເລືອກ" ສາມາດແປໄດ້ວ່າ, "ຜູ້ທີ່ໄດ້ຮັບເລືອກຂອງພຣະເຈົ້າ" ຫລື "ການແຕ່ງຕັ້ງພຣະເມຊີອາເປັນພິເສດຂອງພຣະເຈົ້າ" ຫລື "ຜູ້ທີ່ພຣະເຈົ້າໄດ້ແຕ່ງຕັ້ງ."


generated on Thu Jul 10 08:45:04 2025

## ຜູ້ນຳຊາວຢິວ, ອຳນາດການປົກຄອງຊາວຢິວ, ຫົວໜ້າສາສະໜາ

### ນິຍາມ

ຄຳວ່າ "ຜູ້ນຳຊາວຢິວ" ຫລື "ອຳນາດການປົກຄອງຊາວຢິວ" ໝາຍເຖິງຜູ້ນຳທາງສາສະໜາ ເຊັ່ນ:
ພວກປະໂຣຫິດແລະຄຣູສອນທຳບັນຍັດຂອງພຣະເຈົ້າ . ພວກເຂົາຍັງມີອຳນາດໃນການຕັດສິນກ່ຽວກັບເລື່ອງທີ່ບໍ່ແມ່ນສາສະໜາເຊັ່ນກັນ.

- ຜູ້ນຳຊາວຢິວແມ່ນປະໂຣຫິດໃຫຍ່, ຫົວໜ້າປະໂຣຫິດແລະພວກທຳມະຈານ (ຄຣູສາສະໜາກ່ຽວກັບທຳບັນຍັດຂອງພຣະເຈົ້າ).
- ສອງກຸ່ມໃຫຍ່ຂອງຜູ້ນຳຊາວຢິວແມ່ນ ພວກຟາຣີຊາຍແລະພວກຊາດູກາຍ.
- ຜູ້ນຳຊາວຢິວເຈັດສິບຄົນໄດ້ປະຊຸມກັນໃນສະພາຢິວໃນນະຄອນເຢຣູຊາເລັມເພື່ອຕັດສິນກ່ຽວກັບບັນຫາກົດໝາຍ.
- ຜູ້ນຳຊາວຢິວຫລາຍຄົນມີຄວາມພາກພູມໃຈແລະ ຄິດວ່າພວກເຂົາເປັນຄົນຊອບທຳ.
  ພວກເຂົາອິດສາພຣະເຢຊູແລະຢາກທຳຮ້າຍພຣະອົງ. ພວກເຂົາອ້າງວ່າຮູ້ຈັກພຣະເຈົ້າແຕ່ບໍ່ເຊື່ອຟັງພຣະອົງ.
- ຄຳເວົ້າທີ່ວ່າ "ພວກຢິວ" ມັກເວົ້າເຖິງຜູ້ນຳຊາວຢິວ , ໂດຍສະເພາະໃນສະພາບການທີ່ພວກເຂົາຄຽດແຄ້ນພຣະເຢຊູ
  ແລະໄດ້ພະຍາຍາມຫຼອກລວງຫລືທຳຮ້າຍພຣະອົງ.
- ຂ້ອເລົ່ານີ້ຍັງສາມາດແປເປັນ "ຜູ້ປົກຄອງຊາວຢິວ" ຫຼື "ຜູ້ຊາຍທີ່ປົກຄອງເໜືອປະຊາຊົນຢິວ" ຫຼື "ຜູ້ນຳສາສະໜາຢິວ."

## ຜູ້ບັນຊາການ, ສັ່ງການ

### ນິຍາມ

ຄຳວ່າ "ຜູ້ບັນຊາການ" ກ່າວເຖິງຜູ້ນຳຂອງກອງທັບ ທີ່ຮັບຜິດຊອບໃນການນຳ ແລະ ການສັ່ງການທະຫານສະເພາະກຸ່ມ.

- "ບັນຊາການ" ກອງທັບ ໝາຍເຖິງການນຳແລະຢູ່ໃນອຳນາດໜ້າທີ່ຂອງກອງທັບ.
- ຜູ້ບັນຊາການເປັນຜູ້ຄວບຄຸມດູແລທະຫານກຸ່ມນ້ອຍ ຫລື ກຸ່ມໃຫຍ່, ກໍໄດ້ ຢ່າງເຊັ່ນໜຶ່ງພັນຄົນ.
- ຄຳນີ້ໃຊ້ກ່າວເຖິງພຣະເຈົ້າຢາເວ ຜູ້ຊຶ່ງເປັນຜູ້ບັນຊາການກອງທັບທູດສະຫວັນດ້ວຍ.
- ການແປຄຳວ່າ "ຜູ້ບັນຊາການ" ໃນຮູບແບບອື່ນໆສາມາດແປໄດ້ລວມເຖິງ, "ຜູ້ນຳ" ຫຼື "ຫົວໜ້າ" ຫຼື "ເຈົ້າໜ້າທີ."
- ຄຳວ່າ "ບັນຊາການ" ກອງທັບສາມາດແປໄດ້ວ່າ "ນຳ" ຫຼື "ຄວບຄຸມດູແລ.

## ຜູ້ບໍ່ເຊື່ອ, ບໍ່ເຊື່ອ

### ນິຍາມ

ຄຳວ່າ" ບໍ່ເຊື່ອ" ໝາຍເຖິງການບໍ່ເຊື່ອສິ່ງໃດຫລືບຸກຄົນໃດ.

- ໃນພຣະຄຳພີ," ບໍ່ເຊື່ອ" ອ້າງເຖິງການບໍ່ເຊື່ອຫລືບໍ່ວາງໃຈໃນພຣະເຢຊູ ພຣະອົງເປັນພຣະຊ່ວຍໃຫ້ລອດພົ້ນຂອງຄົນນັ້ນ.
- ບຸກຄົນທີ່ບໍ່ເຊື່ອໃນພຣະເຢຊູເອີ້ນວ່າ" ຜູ້ບໍ່ເຊື່ອ."

### ຄຳແນະນຳໃນການແປ

- ອີກວິທີໜຶ່ງໃນການແປ "ບໍ່ເຊື່ອ "ອາດຈະລວມເຖິງການ, "ຂາດຄວາມເຊື່ອ " ຫລື" ບໍ່ເຊື່ອຟັງ. "
- ຄຳວ່າ " ຜູ້ບໍ່ເຊື່ອຟັງ " ສາມາດແປວ່າ " ບຸກຄົນທີ່ບໍ່ເຊື່ອໃນພຣະເຢຊູຄຣິດ " ຫລື "
  ບາງຄົນຊຶ່ງບໍ່ເຊື່ອໃນພຣະເຢຊູຄຣິດວ່າເປັນພຣະຜູ້ຊ່ວຍໃຫ້ລອດພົ້ນ."

## ຜູ້ປະກາດ, ຜູ້ປະກາດຂ່າວປະເສີດ

### ນິຍາມ

ຄຳວ່າ "ຜູ້ປະກາດ" ແມ່ນຄົນທີ່ບອກຄົນອື່ນເຖິງຂ່າວປະເສີດເລື່ອງພຣະເຢຊູຄຣິດ.

- ຄວາມໝາຍຕາມຕົວໜັງສືຄຳວ່າ "ຜູ້ປະກາດ" ແມ່ນ "ລາງຄົນທີ່ເທດສະໜາຂ່າວປະເສີດ."
- ພຣະເຢຊູຊຶ່ງໄດ້ສັ່ງອັກຄະສາວົກຂອງພຣະອົງອອກໄປເຜີຍແຜ່ຂ່າວປະເສີດ
  ກ່ຽວກັບການຈະເປັນສ່ວນໜຶ່ງຂອງອານາຈັກຂອງພຣະເຈົ້າ ໂດຍການວາງໃຈໃນພຣະເຢຊູ
  ແລະການຖວາຍບູຊາຂອງພຣະອົງສຳລັບຄວາມບາບ.
- ຄຣິສຕຽນທຸກຄົນຖືກກະຕຸ້ນໃຫ້ແບ່ງປັນຂ່າວປະເສີດ.


generated on Thu Jul 10 08:45:04 2025

- ຄຣິສຕຽນບາງຄົນໄດ້ຮັບຂອງປະທານຝ່າຍວິນຍານສະເພາະເພື່ອບອກເລົ່າຂ່າວປະເສີດໄດ້ຢ່າງມີປະສິດທິພາບແກ່ຄົນອື່ນ. ກ່າວໄວ້ວ່າຄົນເຫລົ່ານີ້ມີຂອງປະທານໃນການປະກາດຂ່າວປະເສີດແລະຖືກຮຽກເອີ້ນໃຫ້ເປັນ "ຜູ້ປະກາດ."

### ຄໍາແນະນໍາໃນການແປ

- ຄໍາວ່າ "ຜູ້ປະກາດ" ສາມາດແປໄດ້ອີກວ່າ, "ລາງຄົນທີ່ເທດສະໜາຂ່າວປະເສີດ" ຫລື "ຜູ້ສອນຂ່າວປະເສີດ" ຫລື "ຄົນທີ່ປະກາດຂ່າວປະເສີດ."

## ຜູ້ປະກາດພຣະທໍາ,ຜູ້ທໍານວຍ,ຜູ້ເຜີຍພຣະວັດຈະນະ,ຜູ້ປະກາດ,ຜູ້ພະຍາກອນ

### ນິຍາມ

"ຜູ້ປະກາດພະທໍາ" ຄື ຜູ້ຊາຍທີ່ເວົ້າຂ່າວສານຂອງພະເຈົ້າໃຫ້ແກ່ປະຊາຊົນ ຜູ້ຍິງທີ່ເຮັດແບບນີ້ຮຽກວ່າ "ຜູ້ປະກາດພະທໍາຍິງ"

- ຫລາຍເທື່ອຜູ້ປະກາດພະທໍາຈະຕັກເຕືອນປະຊາຊົນໃຫ້ຫັນກັບຈາກຄວາມບາບຂອງພວກເຂົາແລະໃຫ້ເຊື່ອພະເຈົ້າ
- "ຄໍາເຜີຍພະວັດຈະນະ"ເປັນຂ່າວສານທີ່ຜູ້ປະກາດພະທໍາເວົ້າ ການ"ເຜີຍພະວັດຈະນະ"ໝາຍເຖິງການເວົ້າຂ່າວສານຂອງພະເຈົ້າ
- ຫລາຍເທື່ອຂ່າວສານຂອງຄໍາເຜີຍພະວັດຈະນະນັ້ນຈະກ່ຽວກັບສິ່ງທີ່ຈະເກີດຂຶ້ນໃນອະນາຄົດ
- ຄໍາເຜີຍພະວັດຈະນະຕ່າງໆ ໃນພັນທະສັນຍາເດີມໄດ້ສໍາເຣັດແລ້ວ
- ໃນພະຄໍາພີ ຊຸດພະທໍາທີ່ຂຽນໄວ້ໂດຍຜູ້ປະກາດພະທໍາບາງເທື່ອອ້າງເຖິງໃນຖານະເປັນ "ຜູ້ປະກາດພະທໍາ" ດ້ວຍ
- ຕົວຢ່າງເຊັ່ນປະໂຫຍກຄໍາວ່າ"ທໍາມະບັນຍັດແລະຜູ້ປະກາດພະທໍາ" ເປັນວິທີທີ່ຈະອ້າງອີງຂໍ້ພະຄໍາພີ ພາສາເຮັບເຣີທັ້ງໝົດ ຊຶ່ງຮູ້ຈັກກັນໃນອີກຄໍາວ່າ "ພັນທະສັນຍາເດີມ"
- ຄໍາສັບທີ່ເກົ່າກວ່າອີກຄໍາຂອງຄໍາວ່າຜູ້ປະກາດພະທໍາຄື "ຜູ້ພະຍາກອນ" ຫລື "ບາງຄົນທີ່ຮັບຮູ້"
- ບາງເທື່ອຄໍາວ່າ "ຜູ້ພະຍາກອນ" ອ້າງເຖິງ ຜູ້ປະກາດພະທໍາທຽມເທັດ ຫລື ຄົນທີ່ທໍານວາຍໂຊກຊະຕາ

### ຄໍາແນະນໍາໃນການແປ

- ຄໍາວ່າ "ຜູ້ປະກາດພະທໍາ" ສາມາດແປວ່າ "ຜູ້ປະກາດຂອງພະເຈົ້າ" ຫລື "ຜູ້ຊາຍຜູ້ທີ່ເວົ້າເພື່ອພະເຈົ້າ" ຫລື "ຜູ້ຊາຍທີ່ເວົ້າຂ່າວສານຂອງພະເຈົ້າ"
- "ຜູ້ພະຍາກອນ" ສາມາດແປວ່າ "ບຸກຄົນຜູ້ເຫັນນິມິດທັ່ງຫຼາຍ" ຫລື "ຜູ້ຊາຍທີ່ເຫັນອະນາຄົດຈາກພະເຈົ້າ"
- ຄໍາວ່າ "ຜູ້ປະກາດພະທໍາຍິງ" ສາມາດແປລວ່າ "ຜູ້ປຣະກາດຍິງສໍາລັບພະເຈົ້າ" ຫລື "ຜູ້ຍິງຜູ້ທີ່ເວົ້າສໍາລັບພະເຈົ້າ" ຫລື "ຜູ້ຍິງຜູ້ທີ່ເວົ້າຂ່າວສານຂອງພະເຈົ້າ"
- ວິທີແປ "ຄໍາເຜີຍພະວັດຈະນະ" ສາມາດທັ້ງຫມົດ "ຂ່າວສານຈາກພະເຈົ້າ" ຫລື "ຜູ້ເຜີຍພະວັດຈະນະຂ່າວສານ"
- ຄໍາວ່າ "ການເຜີຍພະວັດຈະນະ" ສາມາດແປວ່າ "ເວົ້າພະຄໍາຈາກພະເຈົ້າ" ຫລື "ບອກຂ່າວສານຂອງພະເຈົ້າ"
- ຄໍາກ່າວອຸບປະມາອຸບປະມັຍ "ບັນຍັດແລະຜູ້ປະກາດພະທໍາທັ່ງຫຼາຍ" ສາມາດແປວ່າ "ຫນັງສືທັ່ງຫຼາຍຂອງບັນຍັດແລະຜູ້ປະກາດພະທໍາທັ່ງຫຼາຍ" ຫລື "ທຸກສິ່ງທີ່ໄດ້ຂຽນກ່ຽວກັບພະເຈົ້າແລະປະຊາຊົນຂອງພະອົງ ທັ່ງຫມົດທັ່ງບັນຍັດຂອງພະເຈົ້າແລະສິ່ງທີ່ຜູ້ປະກາດພະທໍາໄດ້ເທດສະຫນາ"

## ຜູ້ປະກາດພຣະທໍາປອມ

### ນິຍາມ

ຜູ້ປະກາດພຣະທໍາປອມຄື ຄົນທີ່ອ້າງຜິດໆວ່າຄໍາກ່າວຂອງເຂົານັ້ນມາຈາກພຣະເຈົ້າ.

- ການທໍານວາຍຂອງຜູ້ປະກາດພຣະທັມປອມນັ້ນໂດຍປົກກະຕິບໍ່ສໍາເລັດ, ນັ້ນຄື, ບໍ່ເປັນຄວາມຈິງ.
- ຜູ້ປະກາດພຣະທັມປອມສອນພຣະວັດຈະນະທີ່ມີບາງສ່ວນ ຫລືທັ້ງໝົດຂັດກັບສິ່ງທີ່ພຣະຄັມພີບອກໄວ້.
- ຄໍານີ້ສາມາດແປໄດ້ອີກວ່າ "ຄົນທີ່ອ້າງຕົນຢ່າງປອມວ່າເປັນຕົວແທນຂອງພຣະເຈົ້າ" ຫລື "ບາງຄົນແອບອ້າງວ່າ ເວົ້າພຣະວັດຈະນະຂອງພຣະເຈົ້າ."
- ພັນທະສັນຍາໃໝ່ສອນວ່າໃນເວລາສຸດທ້າຍນັ້ນຈະເກີດຜູ້ປະກາດພຣະທັມປອມຢ່າງຫລວງຫລາຍ ຜູ້ຊຶ່ງພະຍາຍາມຫລອກລວງປະຊາຊົນໃຫ້ພວກເຂົາຄິດວ່າພວກເຂົາມາຈາກພຣະເຈົ້າ.

## ຜູ້ປົກຄອງ

### ນິຍາມ

ຜູ້ປົກຄອງ ຄືບຸກ ຄົນທີ່ຮັບໃຊ້ໃນຄຣິສຕະຈັກທ້ອງຖິ່ນ ຊ່ວຍເຫລືອ ບັນດາຜີນ້ອງ ຜູ້ທີ່ມີຄວາມເຊື່ອ ໃນຄວາມຕ້ອງການທີ່ຈຳເປັນເຊັ່ນ ອາຫານ ຫລື ເງິນ.

- ຄຳວ່າ"ຜູ້ປົກຄອງ" ມາຈາກພາສາກຣີກຫມາຍເຖິ"ຄົນຮັບໃຊ້" ຫລື "ຜູ້ຮັບໃຊ້ພຣະເຈົ້າ"
- ຕັ້ງແຕ່ຕອນເລີ່ມຕົ້ນ,ຂອງຄຣິສຕຈັກ, ການເປັນຜູ້ປົກຄອງ

ໄດ້ຮັບບົດບາດ ແລະ ພັນທະກິດທີ່ຊັດເຈນ ໃນອົງກອນຄຣິສຕະຈັກ.

- ຕົວຢ່າງເຊັ່ນ, ໃນພັນທະສັນຍາໃໝ່, ບັນດາ ຜູ້ປົກຄອງ ຈະຕ້ອງສ້າງຄວາມໝັ້ນໃຈວ່າ ບໍ່ວ່າຈະເປັນເງິນ ຫລື ອາຫານ ທີ່ຜູ້ເຊື່ອໄດ້ ຖວາຍໃຫ້ ຈະຕ້ອງແບ່ງປັ່ນ ແມ່ມ້າຍ ທ່ານກາງ ພວກເຂົາ ຢ່າງຍຸຕິທັມ.
- ຄຳວ່າ "ຜູ້ປົກຄອງ" ອາຈແປເປັນ " ຜູ້ຮັບໃຊ້ຂອງຄຣິສຕະຈັກ" ຫລື "ຄົນງານຂອງຄຣິສຕະຈັກ"ຫລື "ຜູ້ຮັບໃຊ້ຂອງຄຣິສຕະຈັກ"ຫລື ຄຳເວົ້າອື່ນໆ ທີ່ສະແດງໃຫ້ເຫັນວ່າ ບຸກຄົນນັ້ນໄດ້ຮັບການແຕ່ງຕັ້ງ ຢ່າງເປັນທາງການ ເພື່ອທຳງານສະເພາະທີ່ເປັນປະໂຍດ ຕໍ່ພີນ້ອງຄຣິ ສະຕຈັກ ໃນທ້ອງຖິ່ນນັ້ນໆ.

## ຜູ້ປົກຄອງ,ຜູ້ວ່າການ,ຜູ້ທຳໜ້າທີ່ທູດ,ຣັຖະບານ

### ນິຍາມ

" ຜູ້ປົກຄອງ" ຄືບຸກຄົນທີ່ປົກຄອງເໜືອຣັຖະບານ, ພູມີພາກ, ຫລືເຂດແດນ. ຄຳວ່າ "ປົກຄອງ" ໝາຍເຖິງການໃຫ້ຄຳແນະນຳ ນຳທາງ ຫລືບໍລິຫານຈັດການປະຊາຊົນ.

- ຄຳວ່າ "ຜູ້ທຳໜ້າທີ່ທູດ" ເປັນຕຳແໜ່ງພິເສດສະເພາະສຳຫລັບຜູ້ປົກຄອງຜູ້ທີ່ປົກຄອງແຂວງຂອງໂຣມ.
- ໃນຊ່ວງເວລາພຣະຄັມພີ ຜູ້ວ່າການຈະຖືກແຕ່ງຕັ້ງໂດຍກະສັດຫລືຈັກກະພັດແລະຢູ່ພາຍໃຕ້ອຳນາດສິດຂາດຂອງເຂົາ.
- "ຣັຖະບານ" ປະກອບໄປດ້ວຍຜູ້ປົກຄອງທັງໝົດທີ່ປົກຄອງປະເທດຫລືອານາຈັກ
  ຜູ້ປົກຄອງເຫຼົ່ານີ້ຈະບັນຍັດກົດໝາຍເພື່ອເປັນການນຳຄວາມປະພຶດຂອງປະຊາຊົນຂອງພວກເຂົາ.

ດັ່ງນັ້ນຈຶ່ງມີສັນຕິສຸກຄວາມປອດພັຍ ແລະຄວາມໝັ້ນຄົງ ຫລືຮັບປະຊາຊົນໃນປະເທດນັ້ນ.

%ຄຳແນະນຳການແປ

- ຄຳວ່າ "ຜູ້ວ່າການ" ສາມາດແປໄດ້ອີກວ່າ" ຜູ້ປົກຄອງ" ຫລື

" ຜູ້ດູແລທ້ອງຖິ່ນ" ຫລື" ຜູ້ນຳຫົວໄປ" ຫລື ຜູ້ປົກຄອງເໜືອດິນແດນນ້ອຍໆ."

- ຂຶ້ນຢູ່ກັບບໍຣິບົດ ຄຳວ່າ"ຜູ້ວ່າການ" ສາມາດແປໄດ້ອີກວ່າ

"ປົກຄອງເໜືອ" ຫລື "ນຳ" ຫລື "ຈັດການ" ຫລື"ກຳກັບດູແລ"

- ຄຳວ່າ "ຜູ້ວ່າການ "ຄວນແປໃຫ້ແຕກຕ່າງຈາກຄຳວ່າກະສັດ

ຫລືຈັກກະພັດ ເພາະຜູ້ວ່າການເປັນຜູ້ປົກຄອງທີ່ມີອຳນາດນ້ອຍ ກ່ວາທີ່ຢູ່ພາຍໃຕ້ອຳນາດສິດຂາດຂອງພວກເຂົາເຫຼົ່ານັ້ນ.

- ຄຳວ່າ "ຜູ້ທຳໜ້າທີ່ແທນທູດ "ສາມາດແປວ່າ "ຜູ້ວ່າຣາຊການໂຣມ" ຫລື "ຜູ້ວ່າຣາຊະການແຂວງຂອງໂຣມ."

## ຜູ້ປົກຄອງ, ຜູ້ປົກຄອງຫຼາຍຄົນ, ຄອບຄອງ

### ນິຍາມ

ຄຳວ່າ "ຜູ້ປົກຄອງ" ທົ່ວໄປຈະເປັນການອ້າງອີງເຖິງບຸກຄົນທີ່ມີອຳນາດເໜືອຄົນອື່ນ ເຊັ່ນຜູ້ນຳຂອງປະເທດ, ອານາຈັກ,ຫຼືກຸ່ມສາດສະໜາ.

- ໃນພັນທະສັນຍາເດີມ ກະສັດຍັງຖືກອ້າງເຖິງດ້ວຍຄຳຫົວໄປວ່າ "ຜູ້ປົກຄອງ" ເຊັ່ນດຽວກັບໃນຄຳເວົ້າທີ່ວ່າ
  "ແຕ່ງຕັ້ງພຣະອົງໃຫ້ເປັນຜູ້ປົກຄອງເໜືອອິສະຣາເອນ."
- ພຣະເຈົ້າຖືກອ້າງອີງວ່າເປັນຜູ້ປົກຄອງສູງສຸດ, ຜູ້ທີ່ປົກຄອງເໜືອຜູ້ປົກຄອງອື່ນໆທັງສິ້ນ.


generated on Thu Jul 10 08:45:04 2025

- ໃນພັນທະສັນຍາໃໝ່ ຜູ້ນຳຂອງສາລາໂຮງທັມເອີນວ່າ "ຜູ້ປົກຄອງ".
- ຜູ້ຄອບຄອງແບບອື່ນໃນພັນທະສັນຍາໃໝ່ຄື "ເຈົ້າເມືອງ."
- ຂຶ້ນຢູ່ກັບບໍຣິບົດຄຳວ່າ "ຜູ້ປົກຄອງ" ສາມາດແປໄດ້ວ່າ "ຜູ້ນຳ" ຫຼື "ຜູ້ມີອຳນາດເໜືອ."
- ການກະທຳໃນ "ການປົກຄອງ" ໝາຍເຖິງການ "ນຳ" ການ "ມີອຳນາດເໜືອ" ນີ້ຄືຄວາມໝາຍຢ່າງດຽວກັບ "ການຄອງຣາຊ" ເມື່ອອ້າງເຖິງການປົກຄອງຂອງກະສັດ.

## ຜູ້ພິພາກສາ, ພວກຜູ້ພິພາກສາ

### ນິຍາມ

ຜູ້ພິພາກສາຄືເຈົ້າໜ້າທີ ໆໄດ້ຮັບການແຕ່ງຕັ້ງໃຫ້ເປັນຜູ້ວິນິດໃສແລະຕັດສິນໃຈກ່ຽວກັບກົດໝາຍ.

- ໃນສະໄໝພຣະຄັມພີ,ຜູ້ພິພາກສາມີໜ້າທີ່ຕັດສິນຄວາມຂັດແຍ່ງກັນລະຫວ່າງປະຊາຊົນ.
- ຂຶ້ນຢູ່ກັບບໍລິບົດ ວິທີການແປຄຳນີ້ສາມາດລວມເອົາ "ຜູ້ວິນິດໃສທາງການປົກຄອງ" ຫຼື "ເຈົ້າໜ້າທີ່ທາງກົດໝາຍ" ຫຼື "ຜູ້ນຳຂອງເມືອງ."

## ຜູ້ລ້ຽງແກະ, ລ້ຽງແກະ

### ນິຍາມ

ຜູ້ລ້ຽງແກະ ຄືບຸກຄົນທີ່ດູແລຝູງແກະ. ຄຳກິລິຍາ "ລ້ຽງແກະ"ໝາຍການປົກປ້ອງແກະແລະຈັດຕຽມອາຫານນ້ຳດື່ມໃຫ້ກັບພວກມັນ.

- ຜູ້ລ້ຽງແກະຈະເຝົ້າດູແລຝູງແກະ, ພາພວກມັນໄປຫາອາຫານແລະນ້ຳດື່ມທີ່ດີ. ຜູ້ລ້ຽງແກະຍັງຮັກສາຝູງແກະບໍ່ໃຫ້ຫລົງເສຍ ແລະປົກປ້ອງພວກມັນຈາກສັດຮ້າຍທັ້ງຫລາຍ.

- ຫລາຍຄັ້ງຄຳນີ້ຍັງໃຊ້ປຽບທຽບໃນພຣະຄຳພີເພື່ອອ້າງເຖິງ ການດູແລຄວາມຕ້ອງການທາງດ້ານຈິດວິນຍານຂອງຄົນ. ລວມເຖິງການສອນພວກເຂົາໃນສິ່ງທີ່ເຈົ້າກ່າວໃນພຣະຄຳ ແລະນຳພວກເຂົາໃຫ້ມີຊີວິດໃນທາງທີ່ຖືກຕ້ອງ.

- ໃນພັນທະສັນຍາເດີມ, ພຣະເຈົ້າຖືກເອີ້ນວ່າ "ຜູ້ລ້ຽງແກະ" ຂອງປະຊາຊົນຂອງພຣະອົງເພາະພຣະອົງຊົງດູແລຄວາມຕ້ອງການຂອງພວກເຂົາທຸກຢ່າງ. ພຣະອົງຮັກສາພວກເຂົາແລະຊົງນຳພວກເຂົາດ້ວຍ.

- ໂມເຊເປັນຜູ້ລ້ຽງແກະຂອງຊາວອິດສະຣາເອນ ໃນຖານະທີ່ເປັນຜູ້ນຳທາງດ້ານຝ່າຍວິນຍານໃນການນະມັດສະການພຣະເຈົ້າຢາເວ ແລະເປັນຜູ້ນຳພວກເຂົາທາງດ້ານຮ່າງກາຍດ້ວຍ ໃນການເດີນທາງໄປຍັງແຜ່ນດິນການາອານ.

- ໃນພັນທະສັນຍາໃໝ່, ພຣະເຢຊູຊົງເອີ້ນພຣະອົງເອງວ່າເປັນ "ຜູ້ລ້ຽງທີ່ດີ." ອັກຄະສາວົກເວົ້າເຖິງພຣະອົງວ່າເປັນ "ເປັນຜູ້ລ້ຽງທີ່ຍິ່ງໃຫຍ່"ເໜືອຄຣິສຕະຈັກ.

- ໃນພັນທະສັນຍາໃໝ່, ຄຳວ່າ "ຜູ້ລ້ຽງແກະ" ຍັງໃຊ້ອ້າງເຖິງບຸກຄົນທີ່ເປັນຜູ້ນຳທາງດ້ານຝ່າຍຈິດວິນຍານຂອງເຫລົ່າຜູ້ເຊື່ອ. ຄຳວ່າ "ສິດຍາພິບານ" ມີຄວາມໝາຍເໝືອນກັບຄຳວ່າ "ຜູ້ລ້ຽງແກະ." ຜູ້ປົກຄອງແລະຜູ້ດູແລກໍເອີ້ນວ່າຜູ້ລ້ຽງແກະເຊັ່ນກັນ.

### ຄຳແນະນຳໃນການແປ

- ເມື່ອໃຊ້ຕາມຕົວອັກສອນ, ການກະທຳ "ຜູ້ລ້ຽງແກະ" ສາມາດແປວ່າ "ການດູແລແກະ" ຫລື "ການເຝົ້າຮັກສາຝູງແກະ."
- ບຸກຄົນ "ຜູ້ລ້ຽງແກະ" ສາມາດແປວ່າ, "ບຸກຄົນຜູ້ດູຝູງແກະ" ຫລື "ຜູ້ນຳຝູງແກະ" ຫລື "ຜູ້ໃຫ້ຄວາມດູແລຝູງແກະ. "
- ເມື່ອໃຊ້ຄຳອຸປະມາອຸປະໄມ, ວິທີແປທີ່ແຕກຕ່າງໄປໃນການແປຄຳນີ້ສາມາດລວມ, "ຜູ້ດູແລຝູງແກະຝ່າຍຈິດວິນຍານ"ຫລື ຜູ້ນຳຝ່າຍຈິດວິນຍານ" ຫລື " ຜູ້ທີ່ເໝືອນຜູ້ລ້ຽງຝູງແກະ" ຫລື "ຜູ້ດູແລປະຊາຊົນຂອງເຂົາເໝືອນຜູ້ລ້ຽງແກະດູແລຝູງແກະຂອງເຂົາ" ຫລື "ຜູ້ນຳປະຊາຊົນຂອງເຂົາເໝືອນຜູ້ລ້ຽງແກະນຳຝູງແກະຂອງເຂົາ" ຫລື "ຜູ້ດູແລຝູງແກະຂອງພຣະເຈົ້າ."
- ໃນບາງບໍລິບົດ "ຜູ້ລ້ຽງແກະ" ສາມາດແປວ່າ "ຜູ້ນຳ" ຫລື "ນຳ" ຫລື "ຜູ້ໃຫ້ການດູແລ."
- ຄຳກ່າວ, "ການລ້ຽງແກະ".


generated on Thu Jul 10 08:45:04 2025

## ຜູ້ສືບສະກຸນ

### ນິຍາມ

ຄຳວ່າ "ຜູ້ສືບສະກຸນ" ຄືການອ້າງອີງ ຫຶ່ວໄປເຖິງການສືບເຊື້ອສາຍຂອງປະຊາຊົນ ຫລືສັດ.

- ຫລາຍເທື່ອ ໃນພຣະຄຳພີນັ້ນ, ຄຳວ່າ "ຜູ້ສືບເຊື້ອສາຍ" ມີຄວາມໝາຍດຽວກັນກັບ "ລູກຫລານ" ຫລື "ຜູ້ສືບສະກຸນ."
- ຄຳວ່າ "ເມັດພັນ" ບາງເທື່ອໃຊ້ໃນແບບ ອຸບປະມາ ອ້າງເຖິງ ຜູ້ສືບສະກຸນ.

## ຜູ້ສູງສົ່ງ, ຊັ້ນສູງ

### ນິຍາມ

ຄຳວ່າ“ ກຽດຕິຍົດ” ໝາຍ ເຖິງສິ່ງທີ່ດີເລີດແລະມີຄຸນນະພາບສູງ. "ຄົນຊັ້ນສູງ" ແມ່ນບຸກຄົນທີ່ມີຖານະທາງດ້ານການເມືອງຫຼືສັງຄົມຊັ້ນສູງ.

- ຄົນທີ່ມີກຽດສະຫງ່າມັກເປັນເຈົ້າ ໜ້າ ທີ່ຂອງລັດ, ເປັນຜູ້ຮັບໃຊ້ທີ່ໃກ້ຊິດຂອງກະສັດ.
- ຄຳວ່າ“ ຄົນສູງສົ່ງ” ຍັງສາມາດແປໄດ້ວ່າ,“ ເຈົ້າໜ້າທີ່ຂອງກະສັດ ” ຫຼື“ ເຈົ້າໜ້າທີ່ລັດຖະບານ” ຫຼື“ ຜູ້ຊາຍທີ່ກໍາເນີດທີ່ສູງສົ່ງ.”

## ຜູ້ສົ່ງຂ່າວສານ

### ນິຍາມ

ຄຳວ່າ, ຜູ້ສົ່ງຂ່າວສານ ບົ່ງບອກເຖິງບາງຄົນທີ່ໄດ້ຮັບການມອບ ໝາຍໜ້າທີ່ໃຫ້ໄປສົ່ງຂ່າວ ເພື່ອໃຫ້ຄົນອື່ນຮູ້.

- ໃນສະໄໝບູຮານ, ຜູ້ສົ່ງຂ່າວສານ ແມ່ນຄົນທີ່ຖືກສົ່ງຈາກສະໜາມຮົບ ເຂົ້າໄປໃນເມືອງ ເພື່ອສົ່ງຂ່າວໃຫ້ຄົນທີ່ຢູ່ໃນເມືອງຮູ້ວ່າ ມີຫຍັງເກີດຂຶ້ນແດ່.
- ທູດສະຫວັນ ແມ່ນທູດພິເສດ ເປັນຜູ້ສົ່ງຂ່າວທີ່ພຣະເຈົ້າໃຊ້ອອກໄປ ເພື່ອບອກຂ່າວໃຫ້ມະນຸດຮູ້. ໃນບາງສະບັບແປຄຳວ່າ "ທູດສະຫວັນ" ເປັນຄຳວ່າ "ຜູ້ສົ່ງຂ່າວສານ."
- ໂຢຮັນ ບັບຕິສະໂຕ ຖືກເອີ້ນວ່າ ເປັນຄົນສົ່ງຂ່າວ ມາກ່ອນເພື່ອມາປະກາດການສະເດັດມາຂອງພຣະເມຊີອາ ແລະ ເພື່ອຕຽມຄົນຂອງພຣະອົງໃຫ້ພ້ອມໃນການຮັບໃຊ້.
- ພວກສາວົກຂອງພຣະເຢຊູເຈົ້າ ກໍເປັນຜູ້ສົ່ງຂ່າວສານ ຄື ອອກໄປປະກາດຂ່າວປະເສີດເລື່ອງອານາຈັກຂອງພຣະເຈົ້າ ໃຫ້ແກ່ຄົນອື່ນໆ.

## ຜູ້ສ້າງ

### ຂໍ້ເທັດຈິງ

ໂດຍທົ່ວໄປ ຄຳວ່າ "ຜູ້ສ້າງ" ຄືບາງຄົນຜູ້ທີ່ນິລະມິດຫຼືທຳສິ່ງຕ່າງໆ.

- ໃນພຣະຄຳພີ ຄຳວ່າ "ຜູ້ສ້າງ" ໃນບາງຄັ້ງຖືກໃຊ້ເປັນເໝືອນຊື່ຫຼືຕຳແໜ່ງຂອງພຣະຢາເວເພາະພຣະອົງຊົງສ້າງສັບພະສິ່ງ.
- ໂດຍປົກກະຕິຄຳນີ້ຖືກໃຊ້ລວມກັບຄຳວ່າ "ຂອງເຂົາ" ຫຼື "ຂອງຂ້ອຍ" ຫຼື "ຂອງທ່ານ."

### ຄຳແນະນຳໃນການແປ

- ຄຳວ່າ "ຜູ້ສ້າງ" ສາມາດແປເປັນ "ພຣະຜູ້ສ້າງ" ຫຼື "ພຣະເຈົ້າຜູ້ຊົງສ້າງ" ຫຼື "ຜູ້ສ້າງສັບພະສິ່ງ."
- ຄຳເວົ້າ "ຜູ້ສ້າງຂອງເຂົາ" ສາມາດແປວ່າ ຜູ້ໜຶ່ງທີ່ຊົງນິລະມິດສ້າງເຂົາ" ຫຼື "ພຣະເຈົ້າຜູ້ຊົງນິລະມິດສ້າງເຂົາ."
- ຄຳເວົ້າ "ຜູ້ສ້າງຂອງທ່ານ" ແລະ "ຜູ້ສ້າງຂອງຂ້ອຍ" ສາມາດແປໄດ້ຄ້າຍຄືກັນ.

## ຜູ້ອາວຸໂສ

### ນິຍາມ

ຜູ້ອາວຸໂສແມ່ນຊາຍທີ່ມີຄຸນນະສົມບັດສູງຝ່າຍຈິດວິນຍານຊຶ່ງມີໜ້າທີ່ໃນການເປັນຜູ້ນຳທາງຝ່າຍຈິດວິນຍານແລະໃນທາງປະຕິບັດໃນບັນດາໄພ່ພົນຂອງພຣະເຈົ້າ.

- ຄຳວ່າ "ຜູ້ອາວຸໂສ" ມາຈາກຄວາມຈິງທີ່ວ່າຜູ້ອາວຸໂສແມ່ນຄົນທີ່ມີອາຍຸຫລາຍ, ຍ້ອນວ່າອາຍຸແລະປະສົບການຂອງພວກເພິ່ນ, ພວກເພິ່ນຈຶ່ງມີສະຕິປັນຍາຫລາຍ.

- ໃນພັນທະສັນຍາເດີມ, ຜູ້ອາວຸໂສໄດ້ຊ່ວຍນໍາຊາວອິດສະຣາເອນໃນເລື່ອງຄວາມຍຸດຕິທໍາໃນສັງຄົມແລະກົດໝາຍຂອງໂມເຊ.
- ໃນພັນທະສັນຍາໃໝ່, ຜູ້ອາວຸໂສຊາວຢິວຍັງຄົງເປັນຜູ້ນໍາໃນກຸ່ມຊົນຂອງຕົນແລະເປັນຜູ້ພິພາກສາຕັດສິນສໍາລັບປະຊາຊົນ.
- ໃນຄຣິສຕະຈັກສະໄໝຍຸກທໍາອິດ, ຄຣິສຕຽນອາວຸໂສມີຄວາມເປັນຜູ້ນໍາທາງຈິດວິນຍານແກ່ກຸ່ມຜູ້ທີ່ເຊື່ອຕາມທ້ອງຖິ່ນ.
- ຜູ້ອາວຸໂສໃນຄຣິສຕະຈັກເຫລົ່ານີ້ ລວມທັງຊາຍໜຸ່ມທີ່ມີຄຸນນະສົມບັດທາງຝ່າຍວິນຍານ.
- ຄໍານີ້ອາດຈະແປວ່າ "ຜູ້ສູງໄວ" ຫລື "ຜູ້ທີ່ຄຸນນະສົມບັດສູງຝ່າຍຈິດວິນຍານເປັນຜູ້ນໍາໃນຄຣິສຕະຈັກ."

## ຜູ້ຮັບໃຊ້, ວຽກງານຮັບໃຊ້

### ນິຍາມ

ໃນພຣະຄໍາພີ, ຄໍາວ່າ, "ຜູ້ຮັບໃຊ້" ແລະ "ວຽກງານຮັບໃຊ້" ເປັນການບົ່ງບອກເຖິງ ການຮັບໃຊ້ຄົນອື່ນ ໂດຍການສອນພຣະຄໍາຂອງພຣະເຈົ້າ ແລະ ການລ້ຽງດູຝ່າຍວິນຍານຂອງພວກເຂົາ. ຄໍາວ່າ "ຜູ້ຮັບໃຊ້" ສາມາດໃຊ້ກ່າວເຖິງຄົນທີ່ຮັບໃຊ້ຄົນອື່ນໃນແບບດຽວກັນນີ.

- ໃນພຣະຄໍາພີເດີມ, ປະໂລຫິດຈະ "ບໍລະບັດຮັບໃຊ້" ພຣະເຈົ້າໃນພຣະວິຫານ ໂດຍການຖວາຍເຄື່ອງເຜົາບູຊາແດ່ພຣະອົງ.
- "ວຽກງານຮັບໃຊ້" ຂອງປະໂລຫິດ ຍັງລວມທັງການເບິ່ງແຍງພຣະວິຫານ ແລະ
  ເປັນໂຕແທນຂອງປະຊາຊົນໃນການອະທິຖານຕໍ່ພຣະເຈົ້າ.
- ໃນພຣະຄໍາພີໃໝ່, ຄໍາວ່າ "ຜູ້ຮັບໃຊ້" ໃນຂ່າວປະເສີດ ແມ່ນໝາຍເຖິງ ບາງຄົນທີ່ໄດ້ສັ່ງສອນຖ້ອຍຄໍາໃຫ້ປະຊາຊົນໄດ້ຮັບຄວາມພົ້ນ
  ໂດຍຄວາມເຊື່ອໃນພຣະເຢຊູເຈົ້າ. ບາງເທື່ອ ກໍເອີ້ນຜູ້ຮັບໃຊ້ວ່າ "ຄົນຮັບໃຊ້."
- ໃນວຽກງານບໍລະບັດຮັບໃຊ້ປະຊາຊົນນັ້ນ ຍັງລວມທັງການລ້ຽງດູຝ່າຍຈິດວິນຍານ ໂດຍສອນພວກເຂົາເຖິງເລື່ອງຂອງພຣະເຈົ້າ.
- ມັນຍັງສາມາດບົ່ງບອກເຖິງການຮັບໃຊ້ປະຊາຊົນໃນທາງດ້ານອ່ຳງກາຍອີກ, ເຊັ່ນ ການເບິ່ງແຍງຄົນເຈັບປ່ວຍ ແລະ
  ການເອົາອາຫານໃຫ້ຄົນທຸກຍາກ.

### ຄໍາແນະນໍາໃນການແປ

- ໃນເນື້ອໃນກ່ຽວກັບການຮັບໃຊ້ປະຊາຊົນ, "ການຮັບໃຊ້" ສາມາດແປໄດ້ວ່າ "ຮັບໃຊ້" ຫລື "ເບິ່ງແຍງ" ຫລື
  "ຕອບສະໜອງຄວາມຈໍາເປັນຂອງ."
- ເມື່ອໃຊ້ກ່າວອ້າງເຖິງການຮັບໃຊ້ໃນພຣະວິຫານ, ຄໍາວ່າ "ຜູ້ຮັບໃຊ້" ສາມາດແປໄດ້ວ່າ "ຮັບໃຊ້ພຣະເຈົ້າໃນພຣະວິຫານ" ຫລື
  "ຖວາຍເຄື່ອງເຜົາບູຊາແດ່ພຣະເຈົ້າ ເພື່ອປະຊາຊົນ."
- ໃນເນື້ອໃນຂອງເລື່ອງທີ່ກ່ຽວຂ້ອງກັບການຮັບໃຊ້ພຣະເຈົ້າ, ນີ້ຍັງສາມາດແປໄດ້ອີກວ່າ "ຮັບໃຊ້" ຫລື "ການເຮັດວຽກເພື່ອພຣະເຈົ້າ."
- ຄໍາເວົ້າວ່າ "ບໍລະບັດ" ສາມາດແປໄດ້ອີກວ່າ "ເບິ່ງແຍງສໍາລັບ" ຫລື "ຈັດຕຽມສໍາລັບ" ຫລື "ໄດ້ຊ່ວຍ."

## ຜູ້ຮັບໃຊ້, ທາດ, ຂ້າທາດ

### ນິຍາມ

ຄໍາວ່າ“ ຜູ້ຮັບໃຊ້” ຍັງສາມາດໝາຍຄວາມວ່າ“ ຂ້າໃຊ້” ແລະໝາຍເຖິງບຸກຄົນຜູ້ທີ່ເຮັດວຽກເພື່ອຄົນອື່ນ, ໂດຍທາງເລືອກຫລືດ້ວຍກໍາລັງ.
ຂໍ້ພຣະຄໍາພີ ອ້ອມຂ້າງໂດຍປົກກະຕິແລ້ວເຮັດໃຫ້ຈະແຈ້ງວ່າຜູ້ຮັບໃຊ້ຫລືຂ້າໃຊ້ຈະຖືກກ່າວເຖິງ.

- ໃນສະໄໝທີ່ຂຽນຄໍາພີ, ຜູ້ຮັບໃຊ້ແລະຂ້າໃຊ້ມີຄວາມແຕກຕ່າງໜ້ອຍ ກວ່າທຸກມື້ນີ້.
  ທັ້ງຜູ້ຮັບໃຊ້ແລະຂ້າໃຊ້ແມ່ນພາກສ່ວນໜຶ່ງທີ່ສໍາຄັນຂອງຄົວເຮືອນນາຍຂອງພວກເຂົາແລະຫຼາຍຄົນກໍໄດ້ຮັບການປະຕິບັດຄືກັນກັບສະມາຊິກໃນຄອບຄົວ.
  ບາງຄັ້ງຜູ້ຮັບໃຊ້ຈະເລືອກທີ່ຈະເປັນຂ້າໃຊ້ຕະຫຼອດຊີວິດຕໍ່ນາຍຂອງລາວ.
- ຂ້າໃຊ້ເປັນຄົນຮັບໃຊ້ຄົນໜຶ່ງເຊິ່ງເປັນຊັບສົມບັດຂອງຄົນທີ່ລາວເຮັດເພື່ອ. ບຸກຄົນທີ່ຊື້ຂ້າໃຊ້ເອີ້ນວ່າ "ເຈົ້າຂອງ" ຫລື "ນາຍ."
  ແມ່ຍິດບາງຄົນປະຕິບັດຕໍ່ຂ້າໃຊ້ຂອງຕົນຢ່າງໂຫດຮ້າຍ, ໃນຂະນະທີ່ນາຍອື່ນໆປະຕິບັດຕໍ່ຂ້າໃຊ້ຂອງພວກເຂົາໄດ້ດີ,
  ຄືກັນກັບຜູ້ຮັບໃຊ້ທີ່ເປັນສະມາຊິກທີ່ມີຄຸນຄ່າຂອງຄົວເຮືອນ.
- ໃນສະ ໄໝ ບູ ຮານ, ບາງຄົນເຕັມໃຈເປັນທາດຂອງບຸກຄົນທີ່ພວກເຂົາເປ ັນ ໜີ ເພື່ອທີ່ຈະ ຊໍ າ ລະ ໜີ ໃຫ້ຄົນນັ້ນ.
- ໃນສະໄໝບູຮານ, ບາງຄົນເຕັມໃຈເປັນທາດຂອງບຸກຄົນທີ່ພວກເຂົາເປັນໜີເພື່ອທີ່ຈະຊໍາລະໜີໃຫ້ຄົນນັ້ນ.
- ໃນຄໍາພີໄບເບິນ, ປະໂຫຍກທີ່ວ່າ "ຂ້ອຍເປັນຜູ້ຮັບໃຊ້ຂອງເຈົ້າ" ຖືກນໍາ
  ໃຊ້ເປັນສັນຍາລັກຂອງຄວາມເຄົາລົບແລະການຮັບໃຊ້ຕໍ່ບຸກຄົນທີ່ມີຕໍາ ແໜ່ງສູງ, ເຊັ່ນກະສັດ.
  ມັນບໍ່ໄດ້ໝາຍຄວາມວ່າຄົນທີ່ເວົ້າເປັນຜູ້ຮັບໃຊ້ທີ່ແທ້ຈິງ.
- ໃນສະໄໝພຣະຄໍາພີເດີມ,
  ຜູ້ທໍານວຍຂອງພຣະເຈົ້າແລະຄົນອື່ນໆທີ່ນະມັດສະການພຣະເຈົ້າມັກຖືກກ່າວເຖິງວ່າເປັນ"ຜູ້ຮັບໃຊ້"ຂອງພຣະເຈົ້າ.
- ໃນພຣະຄໍາພີໃໝ່, ຄົນທີ່ເຊື່ອຟັງພຣະເຈົ້າຜ່ານທາງຄວາມສັດຊື່ໃນພຣະເຢຊູຄຣິດ ມັກຖືກເອີ້ນວ່າ"ຜູ້ຮັບໃຊ້ຂອງພຣະອົງ."
- ຊາວຄຣິດສະຕຽນຍັງຖືກເອີ້ນວ່າ "ຂ້າໃຊ້ຄວາມຊອບທໍາ,"
  ເຊິ່ງເປັນການປຽບທຽບເຖິງຄວາມຜູກພັນໃນການເຊື່ອຟັງພຣະເຈົ້າກັບຄວາມຜູກພັນຂອງຂ້າທາດໃນການເຊື່ອຟັງນາຍຂອງຕົນ.


generated on Thu Jul 10 08:45:04 2025

## ຜູ້ເຊື່ອຖື

### ນິຍາມ

ໃນ ພຣະຄຳພີ , ຄຳວ່າ "ຜູ້ທີ່ເຊື່ອ" ໝາຍເຖິງຄົນທີ່ເຊື່ອແລະເພິ່ງອາໄສພຣະເຢຊູຄຣິດເປັນຜູ້ຊ່ອຍໃຫ້ລອດ.

- ຄຳວ່າ "ຜູ້ທີ່ເຊື່ອ" ມີຄວາມໝາຍແທ້ຈິງວ່າ "ຜູ້ເຊື່ອ."
- ຄຳວ່າ "ຄຣິດສະຕຽນ"
  ໃນທີ່ສຸດໄດ້ກາຍມາເປັນຕຳແໜ່ງຫຼັກສຳລັບຜູ້ທີ່ເຊື່ອເພາະມັນສະແດງວ່າພວກເຂົາເຊື່ອໃນພຣະຄຣິດແລະເຊື່ອຟັງຄຳສອນຂອງພຣະອົງ.

### ຄຳແນະນຳໃນການແປ

- ການແປບາງສະບັບອາດຈະເວົ້າວ່າ "ເຊື່ອໃນພຣະເຢຊູ" ຫລື "ເຊື່ອໃນພຣະຄຣິດ."
- ຄຳສັບນີ້ຍັງສາມາດແປໂດຍ ຄຳສັບຫລືປະໂຫຍກທີ່ມີຄວາມ ໝາຍວ່າ, "ຄົນທີ່ວາງໃຈໃນພຣະເຢຊູ" ຫລື "ຄົນທີ່ຮູ້ຈັກພຣະເຢຊູແລະມີຊີວິດເພື່ອລາວ."
- ອີກວິທີໜຶ່ງທີ່ຈະແປວ່າ "ຜູ້ທີ່ເຊື່ອ" ອາດຈະແມ່ນ "ຜູ້ຕິດຕາມພຣະເຢຊູ" ຫລື "ຜູ້ທີ່ຮູ້ຈັກແລະເຊື່ອຟັງພຣະເຢຊູ."
- ຄຳວ່າ "ຜູ້ທີ່ເຊື່ອ" ແມ່ນຄຳສັບທົ່ວໄປສຳລັບຜູ້ທີ່ເຊື່ອໃນພຣະຄຣິດ, ໃນຂະນະທີ່ "ສາວົກ" ແລະ "ອັກຄະສາວົກ" ໄດ້ຖືກນຳໃຊ້ສະເພາະສຳລັບຄົນທີ່ຮູ້ຈັກພຣະເຢຊູໃນຂະນະທີ່ລາວຍັງມີຊີວິດຢູ່. ມັນເປັນສິ່ງທີ່ດີທີ່ສຸດທີ່ຈະແປຄຳສັບເຫຼົ່ານີ້ດ້ວຍວິທີທີ່ແຕກຕ່າງກັນ, ເພື່ອໃຫ້ມັນມີຄວາມແຕກຕ່າງ.

## ຜູ້ເຮັດຄວາມຊົ່ວ

### ນິຍາມ

ຄຳວ່າ "ຜູ້ເຮັດຄວາມຊົ່ວ" ໂດຍທົ່ວໄປແລ້ວແມ່ນເວົ້າເຖິງຄົນທີ່ເຮັດບາບແລະສິ່ງຊົ່ວຮ້າຍ.

- ຄຳນີ້ສາມາດເປັນຄຳທົ່ວໄປສຳລັບຄົນທີ່ບໍ່ເຊື່ອຟັງພຣະເຈົ້າ.
- ຄຳນີ້ສາມາດແປໂດຍໃຊ້ຄຳວ່າ "ຊົ່ວ" ຫລື "ຊົ່ວຮ້າຍ" ກັບຄຳວ່າ "ການກະທຳ" ຫລື "ການເປັນເຫດ" ບາງສິ່ງບາງຢ່າງ.

## ຜູ້ໄກ່ເກ່ຍ, ຜູ້ເປັນຄົນກາງ

### ນິຍາມ

ຜູ້ໄກ່ເກ່ຍ ແມ່ນຜູ້ທີ່ຊ່ວຍເຮັດໃຫ້ປະຊາຊົນສອງຝ່າຍຫລືຫລາຍກວ່າ ສາມາດແກ້ໄຂສິ່ງທີ່ຕົກລົງກັນບໍ່ໄດ້ ຫລືຍັບຫາທີ່ຂັດແຍ່ງກັນ. ລາວຈະຊ່ວຍໃຫ້ພວກເຂົາເຈົ້າກັບມາຄືນດີກັນ.

- ຍ້ອນປະຊາຊົນເຮັດຜິດບາບ, ພວກເຂົາເປັນສັດຕູກັບພຣະເຈົ້າ ແລະພວກເຂົາກໍສົມຄວນກັບພຣະພິໂຣດແລະການລົງໂທດ ເພາະຄວາມຜິດບາບຂອງພວກເຂົາ, ຄວາມສຳພັນລະຫວ່າງພຣະເຈົ້າກັບປະຊາຊົນຂອງພຣະອົງ ໄດ້ຖືກແຕກຫັກຈົນໝົດສິ້ນ.
- ພຣະເຢຊູເຈົ້າ ເປັນຄົນກາງລະຫວ່າງພຣະເຈົ້າພຣະບິດາ ກັບປະຊາຊົນຂອງພຣະອົງ, ຊຶ່ງເຮັດໃຫ້ຄວາມສຳພັນທີ່ຖືກທຳລາຍໄປແລ້ວ ກັບມາຄືນດີໃໝ່ ໂດຍຄວາມຕາຍຂອງພຣະອົງ ເປັນຄ່າໄຖ່ແທນຄວາມບາບຂອງພວກເຂົາ.

### ຄຳແນະນຳໃນການແປ

- ມີຫລາຍວິທີທີ່ຈະແປຄຳວ່າ "ຜູ້ໄກ່ເກ່ຍ, ຜູ້ເປັນຄົນກາງ" ເຊິ່ງສາມາດແປໄດ້ອີກວ່າ "ຄົນທີ່ຢູ່ລະຫວ່າງບຸກຄົນ" ຫລື "ຜູ້ທີ່ເຮັດໃຫ້ຄືນດີກັນ" ຫລື "ຄົນທີ່ນຳເອົາສັນຕິສຸກມາ."
- ປຽບທຽບຄຳນີ້ກັບຄຳວ່າ "ປະໂລຫິດ" ເມື່ອແປຄວາມໝາຍ. ມັນເປັນການດີທີ່ສຸດ ທີ່ຄຳວ່າ "ຜູ້ໄກ່ເກ່ຍ, ຜູ້ເປັນຄົນກາງ" ແມ່ນແປຄວາມໝາຍແຕກຕ່າງກັນ.


generated on Thu Jul 10 08:45:04 2025

## ຜູ້ໄຮ້ດຽງສາ, ຜູ້ບໍຣິສຸດ

### ນິຍາມ

ຄຳວ່າ "ຜູ້ໄຮ້ດຽງສາ" ໝາຍເຖິງບໍ່ມີຄວາມຜິດໃນອາດຊະຍາກຳຫຼືການກະທຳຜິດອື່ນໆ
ຄຳນີ້ຍັງອາດອ້າງເຖິງຄົນທີ່ບໍ່ໄດ້ມີສ່ວນໃນການກະທຳສົງຊົວ

- ຄົນທີ່ຖືກກ່າວຫາວ່າທຳບ່ຽງຢ່າງຜິດທີ່ບໍ່ມີຄວາມຜິດທີ່ລາວບໍ່ໄດ້ທຳຜິດນັ້ນ
- ບາງຄັ້ງ "ຜູ້ໄຮ້ດຽງສາ"
  ຖືກໃຊ້ເພື່ອອ້າງເຖິງຄົນທີ່ບໍ່ໄດ້ທຳສິ່ງໃດຜິດເຊັ່ນການທີ່ຈະຕ້ອງຖືກປະຕິບັດທີ່ຊົ່ວຮ້າຍທີ່ພວກເຂົາໄດ້ຮັບຢູ່ເຊັ່ນກອງທັບສັດຕູໂຈມຕີ
  "ຜູ້ບໍຣິສຸດ"

### ຄຳແນະນຳໃນການແປ

- ໃນກໍຣະນີສ່ວນໃຫ່ຍຄຳວ່າ "ຜູ້ໄຮ້ດຽງສາ" ສາມາດແປໄດ້ວ່າ "ບໍ່ມີຄວາມ

ຜິດ" ຫຼື "ບໍ່ຕ້ອງຮັບຜິດຊອບ" ຫຼື "ບໍ່ຄວນຖືກຕຳນິ" ສຳຫລັບບາງຢ່າງ

- ເມື່ອອ້າງເຖິງຄົນທີ່ປະສະຈາກຄວາມຜິດໂດຍທົ່ວໄປ ຄຳນີ້ສາມາດແປໄດ້ວ່າ "ຜູ້ທີ່ບໍ່ໄດ້ທຳຫຍັງຜິດ" ຫຼື "ຜູ້ທີ່ບໍ່ໄດ້ມີສ່ວນ
  ຮ່ວມໃນຄວາມຊົ່ວ"
- ຄຳເວົ້າທີ່ປະກົດຫລາຍໆຄັ້ງ "ເລືອດຂອງຜູ້ບໍຣິສຸດ" ສາມາດແປໄດ້ວ່າ "ຄົນທີ່ບໍ່ໄດ້ເຮັດຫຍັງຜິດທີ່ສົມຄວນຈະຖືກຂ່ຳ"
- ຄຳເວົ້າ "ທຳໃຫ້ເລືອດບໍຣິສຸດຫລັ່ງອອກ" ອາດຈະຖືກແປວ່າ "ຂ້າຜູ້ບໍຣິສຸດ" ຫຼື "ຂ້າຄົນທີ່ບໍ່ໄດ້ເຮັດຫຍັງຜິດຖືກຂ້າ"
- ໃນບໍຣິບົດທີ່ຄົນໜຶ່ງກຳລັງຖືກຂ້າ "ບໍຣິສຸດໃນເລື່ອງຄວາມຕາຍ" ສາມາດແປໄດ້ວ່າ "ບໍ່ໄດ້ມີຄວາມຜິດໃນການຕາຍຂອງເຂົາ"
- ເມື່ອເວົ້າເຖິງຄົນທີ່ບໍ່ຍອມຮັບຂ່າວປະເສີດຂອງພຣະເຢຊູເຈົ້າ ແຕ່ບໍ່ຍອມຮັບນັ້ນ "ບໍຣິສຸດໃນເຣື່ອງການຕາຍຂອງເຂົາ"
  ສາມາດແປໄດ້ວ່າ"ບໍ່ຮັບຜິດຊອບບໍ່ວ່າພວກເຂົາຈະຕາຍໃນຝ່າຍວິນຍານຕໍ່ໄປຫຼືບໍ່" ຫຼື "ບໍ່ຮັບຜິດຊອບບໍ່ວ່າພວກເຂົາຈະຮັບຂ່າວນີ້ຫຼືບໍ່"
- ເມື່ອຢູດາໄດ້ເວົ້າວ່າ "ຂ້າພຣະເຈົ້າໄດ້ເຮັດໃຫ້ເລືອດຂອງຜູ້ບໍ່ມີຄວາມຜິດເຖິງແກ່ຄວາມຕາຍ" ລາວກຳລັງເວົ້າວ່າ
  "ຂ້າພຣະເຈົ້າໄດ້ເຮັດຕໍ່ຜູ້ທີ່ບໍ່ມີຄວາມຜິດຫຍັງ" ຫຼື "ຂ້າພຣະເຈົ້າໄດ້ເປັນສາເຫດແຫ່ງການຕາຍຂອງຄົນທີ່ບໍ່ມີບາບ"
- ເມື່ອປີລາດໄດ້ເວົ້າກັງວົກກັບພຣະເຢຊູວ່າ "ເຮົາບໍຣິສຸດໃນໂລຫິດຂອງຜູ້ບໍຣິສຸດນີ້" ປະໂຍດນີ້ແປວ່າ
  "ເຮົາບໍ່ຮັບຜິດຊອບຕໍ່ການປະຫານຜູ້ຊາຍຄົນນີ້ທີ່ບໍ່ໄດ້ເຮັດຫຍັງຜິດເຖິງແກ່ຄວາມຕາຍ"

## ຜົນງານ, ການກະທຳ, ເຮັດການ, ການກະທຳ

### ນິຍາມ

ໃນພຣະຄຳພີໄດ້ກ່າວວ່າ "ຜົນງານ," "ການກະທຳ," ແລະ "ການກະທຳ" ຈະໃຊ້ເພື່ອໝາຍເຖິງສິ່ງຕ່າງໆ ທີ່ພຣະເຈົ້າຫຼືມະນຸດເຮັດເອງ."

- ຄຳວ່າ "ຜົນງານ" ໝາຍເຖິງການເຮັດການຫຼືເຮັດຢ່າງໃດກໍຕາມທີ່ເຮັດເພື່ອຄົນອື່ນ.
- "ຜົນງານ" ຂອງພຣະເຈົ້າ ແລະ "ຜົນງານຈາກພຣະຫັດຂອງພຣະອົງ"
  ເປັນຄວາມໝາຍທີ່ກ່າວເຖິງທຸກສິ່ງທີ່ພຣະອົງຊົງກະທຳຫຼືໄດ້ຊົງກະທຳຮວມເຖິງການຊົງສ້າງໂລກ
  ຊ່ວຍຄົນບາບໃຫ້ລອດພົ້ນຈາກຄວາມຜິດແລະເບິ່ງແຍງເອົາໃຈໃສ່ຕໍ່ຄວາມຕ້ອງການຂອງສິ່ງທີ່ຊົງສ້າງທັງໝົດແລະຮັກສາຈັກກະວານທັງໝົດໃຫ້ຢູ່ໃນທີ.
  ຄຳວ່າ "ຜົນງານ" ແລະ "ການກະທຳ" ຍັງໃຊ້ເພື່ອອ້າງອີງເຖິງການອັດສະຈັນຂອງພຣະເຈົ້າໃນການນິລະມິດສ້າງເຊັ່ນ
  "ການນິລະມິດສ້າງທີ່ຍິ່ງໃຫຍ່" ຫຼື " ການນິລະມິດສ້າງທີ່ໜ້າອັດສະຈັນ."
- ຜົນງານຫຼືການກະທຳທີ່ບຸດຄົນທຳສາມາດເປັນໄປໄດ້ທັ້ງດີແລະບໍ່ດີ.
- ພຣະວິນຍານບໍລິສຸດໃຫ້ສິດອຳນາດຜູ້ທີ່ເຊື່ອໃນການກະທຳດີຊຶ່ງເອີ້ນຍ່ຳໆວ່າ "ຜົນທີ່ດີ."
- ຄົນທັ້ງຫຼາຍບໍ່ໄດ້ຮັບການຊ່ວຍໃຫ້ລອດພົ້ນໂດຍການກະທຳດີຂອງພວກເຂົາຍ່ຳໆດຽວແຕ່ພວກເຂົາລອດດ້ວຍມີຄວາມເຊື່ອໃນພຣະເຢຊູ
  ຄຣິດ.
- "ຜົນງານ"
  ຂອງບຸກຄົນໜຶ່ງສາມາດເປັນສິ່ງທີ່ພວກເຂົາຫາລ້ຽງຊີວິດຫລືເພື່ອຮັບໃຊ້ພຣະເຈົ້າພຣະຄຳພີຍັງກ່າວເຖິງພຣະເຈົ້າວ່າ"ຊົງສ້າງ "

### ຄຳແນະນຳໃນການແປ:

- ການແປ "ງານ" ຫຼື "ການກະທຳ" ອື່ນໆ ອາດຈະເປັ້ນ " ການກະທຳ" ຫຼື "ສິ່ງຕ່າງໆທີ່ເຮັດແລ້ວ."
- ເມື່ອເວົ້າເຖິງ "ງານ" ຫຼື "ການກະທຳ" ຂອງພຣະເຈົ້າແລະ "ການຊົງສ້າງດ້ວຍພຣະຫັດຂອງພຣະອົງ" ຄຳເວົ້າເຫຼົ່ານີ້ອາດຈະແປວ່າ
  "ການອັດສະຈັນ" ຫຼື "ການຊົງສ້າງອັນຍິ່ງໃຫຍ່" ຫຼື "ສິ່ງມະຫັດສະຈັນທີ່ພຣະອົງຊົງສ້າງ."


generated on Thu Jul 10 08:45:04 2025

- ຖ້ອຍຄຳທີ່ວ່າ "ຊົງສ້າງຂອງພຣະເຈົ້າ" ໝາຍຄວາມວ່າ "ສິ່ງທີ່ພຣະເຈົ້າຊົງກຳລັງສ້າງຢູ່ນັ້ນ" ຫຼື "ສິ່ງມະຫັດສະຈັນທີ່ພຣະເຈົ້າຊົງກະທຳ" ຫຼື "ສິ່ງໜ້າອັດສະຈັນທີ່ພຣະເຈົ້າຊົງສ້າງ" ຫຼື "ທຸກສິ່ງທີ່ພຣະເຈົ້າຊົງສ້າງ."
- ຄຳວ່າ "ງານ" ອາດຈະມີຢູ່ໃນຄຳເວົ້າເຊັ່ນ "ງານດີທຸກຢ່າງ" ຫຼື "ຜົນງານດີທຸກຢ່າງ."
- ຄຳວ່າ "ງານ" ອາດຈະມີຄວາມໝາຍກວ້າງອອກໄປຂອງ "ບໍລິການ" ຫຼື "ພັນທະກິດ" ຕົວຢ່າງເຊັ່ນຄຳວ່າ "ການງານຂອງທ່ານໃນອົງພຣະຜູ້ເປັນເຈົ້າ" ສາມາດແປໄດ້ວ່າ "ສິ່ງທີ່ທ່ານທຳເພື່ອອົງພຣະຜູ້ເປັນເຈົ້າ."
- ຄຳທີ່ວ່າ "ກວດສອບວຽກງານຂອງທ່ານເອງ" ມີຄວາມໝາຍທີ່ແປໄດ້ວ່າ "ໃຫ້ແນ່ໃຈວ່າທ່ານກຳລັງເຮັດຫຍັງຢູ່ຄືຖືກພຣະປະສົງຂອງພຣະເຈົ້າ" ຫຼື "ເຮັດໃຫ້ແນ່ໃຈວ່າທ່ານກຳລັງເຮັດຫຍັງຢູ່ເປັນທີ່ພໍພຣະໄທຂອງພຣະເຈົ້າ."
- ຄຳທີ່ກ່າວວ່າ "ການທຳງານຂອງພຣະວິນຍານບໍຣິສຸດ "ໝາຍຄວາມວ່າ "ການມີລິດອຳນາດຂອງພຣະວິນຍານບໍສຸດ" ຫຼື "ພັນທະກິດຂອງພຣະວິນຍານບໍລິສຸດ" ຫຼື "ສິ່ງທີ່ພຣະວິນຍານບໍລິສຸດຊົງກະທຳ."

## ຜົນລະໄມ້, ເກີດຜົນຫຼາຍ

### ນິຍາມ

ຄຳວ່າ "ຜົນລະໄມ້" ຕາມຕົວອັກສອນກ່າວເຖິງສ່ວນນຶ່ງຂອງພືດທີ່ສາມາດກິນໄດ້.ບາງຢ່າງທີ "ເກີດໝາກຜົນຫຼາຍ" ຄືມີໝາກຫຼວງຫຼາຍ,ຄຳເຫຼົ່ານີ້ສາມາດໃຊ້ແບບປຽບທຽບໃນພຣະຄັມພີ.

- ພຣະຄັມພີມັກໃຊ້ " ຜົນ" ເພື່ອກ່າວເຖິງການກະທຳແລະຄວາມຄິດຂອງບຸກຄົນ,ເໝືອນກັບໝາກຜົນຂອງພືດທີ່ສະແດງໃຫ້ເຫັນວ່າພືດນັ້ນຄືຕົ້ນຫຍັງ.ເຊັ່ນດຽວກັນກັບຄຳເວົ້າແລະກ
- ບຸກຄົນສາມາດຜະລິດໝາກຜົນຝ່າຍວິນຍານ ໄດ້ທັງດີແລະບໍ່ດີ,ແຕ່ຄຳວ່າ "ເກີດໝາກຜົນຫຼາຍ," ກໍໃຊ້ແບບປຽບທຽບມັກມີຄວາມໝາຍໃນທາງບວກຂອງການເກີດຜົນດີຢ່າງຫຼວງຫຼາຍ.
- ຄຳວ່າ "ເກີດໝາກຜົນຫຼາຍ" ກໍໃຊ້ແບບປຽບທຽບເພື່ອໝາຍເຖິງ "ຄວາມຈະເຣີນຮຸ່ງເຮືອງ" ຄຳນີ້ມັກບົ່ງບອກເຖິງການມີບຸດ ແລະເຊື້ອສາຍຈຳນວນຫຼາຍ ເຊັ່ນດຽວກັບການມີອາຫານຫຼາຍແລະຄວາມອຸດົມສົມບູນຢ່າງອື່ນໆ.
- ໂດຍທົ່ວໄປ ປະໂຫຍກທີ່ວ່າ "ຜົນຂອງ" ກ່າວເຖິງອັນໃດກໍຕາມທີ່ອອກມາຫຼືຜະລິດໂດຍບາງສິ່ງ ຕົວຢ່າງເຊັ່ນ "ຜົນຂອງສະຕິປັນຍາ" ກ່າວເຖິງສິ່ງທີ່ດີທີ່ເກີດຈາກຄວາມສະຫຼາດ.
- ປະໂຫຍກທີ່ວ່າ" ຜົນຂອງແຜ່ນດິນ" ກ່າວເຖິງທຸກສິ່ງໂດຍທົ່ວໄປທີ່ແຜ່ນດິນໃຫ້ຜົນອອກມາ, ເພື່ອໃຫ້ມະນຸດໄດ້ກິນ,ສິ່ງນີ້ບໍ່ໄດ້ໝາຍເຖິງແຕ່ຜົນລະໄມ້ເທົ່ານັ້ນ ແຕ່ລວມທັ້ງພືດຜັກ ຖົ່ວແລະທັນຍາພືດຕ່າງໆດ້ວຍ.
- ການໃຊ້ແບບອຸບປະມາຂອງຄຳວ່າ "ຜົນຂອງພຣະວິນຍານ" ກ່າວເຖິງຄຸນນະພາບສາສນາທີ່ພຣະວິນຍານບໍຣິສຸດປະທານໃຫ້ໃນການດຳເນີນຊີວິດຂອງປະຊາຊົນຜູ້ທີ່ເຊື່ອຟັງພຣະອົງ.
- ສຳນວນວ່າ, "ຜົນຂອງມີທ້ອງ" ກ່າວເຖິງ "ສິ່ງທີ່ທ້ອງໄດ້ໃຫ້ອອກມາ" ນັ້ນກໍຄືເດັກ.

### ຄຳແນະນຳໃນການແປ

- ເປັນສິ່ງທີ່ດີທີ່ສຸດທີ່ຈະແປຄຳນີ້ໂດຍການໃຊ້ຄຳທົ່ວໄປສຳລັບຄຳວ່າ "ຜົນ" ທີ່ເປັນຄຳທີ່ໃຊ້ໃນພາສາທີ່ແປເພື່ອກ່າວເຖິງຜົນທີ່ບໍຣິໂພກໄດ້ຄືຜົນລະໄມ້.ໃນຫຼາຍໆພາສາອາດຈະເປັນຫຳມະຊາດຫຼາຍກ່ວາຫາກໃຊ້ຄຳເປັນພະຫຸພົດ.
- "ບັນດາຜົນ" ເມື່ອໃດກໍຕາມທີ່ກ່າວເຖິງຫຼາຍກວ່ານຶ່ງຜົນ.
- ຄຳວ່າ "ເກີດຜົນ" ສາມາດແປໄດ້ອີກວ່າ "ເກີດຜົນຝ່າຍວິນຍານຢ່າງຫຼວງຫຼາຍ" ຫຼື "ມີບຸດຫຼາຍ" ຫຼື "ຈະເຣີນຮຸ່ງເຮືອງ" ທັງນີ້ຂຶ້ນຢູ່ກັບບໍຣິບົດນັ້ນໆ.
- ປະໂຫຍດ "ຜົນຂອງແຜ່ນດິນ" ສາມາດແປໄດ້ອີກຢ່າງວ່າ "ອາຫານທີ່ເກີດຈາກແຜ່ນດິນ" ຫຼື "ທັນຍະພືດທີ່ງອກງາມໃນແຜ່ນດິນນັ້ນ".
- ເມື່ອພຣະເຈົ້າຊົງໄດ້ສ້າງມະນຸດແລະສັດ ພຣະອົງຊົງໄດ້ບັນຊາສັບພະສິ່ງນັ້ນວ່າ "ຈົ່ງເກີດຜົນທະວີຄູນ" ຊຶ່ງກ່າວເຖິງການເກີດຜົນຈຳນວນຫຼວງຫຼາຍ ຄຳນີ້ສາມາດແປໄດ້ອີກວ່າ "ເກີດຜົນຫຼວງຫຼາຍ" ຫຼື "ເກີດບັນດາບຸດແລະເຊື້ອສາຍຫຼວງຫຼາຍ" ຫຼື "ຈົ່ງມີບຸດຫຼາຍເພື່ອເຈົ້າຈະໄດ້ມີເຊື້ອສາຍຫຼວງຫຼາຍ".
- ສຳນວນ "ຜົນຂອງມີທ້ອງ" ສາມາດແປໄດ້ອີກວ່າ "ສິ່ງທີ່ທ້ອງໄດ້ໃຫ້ອອກມາ" ຫຼື "ບັນດາເດັກທີ່ຜູ້ຍິງໃຫ້ກຳເນີດ" ຫຼື ພຽງແຕ່ "ບັນດາບຸດ" ເມື່ອເອລີຊາເບັດເວົ້າກັບນາງມາຣີວ່າ " ພຣະພອນຄືສິ່ງທີ່ຢູ່ໃນທ້ອງຂອງເຈົ້າ" ລາວໝາຍເຖິງ "ພຣະພອນຄືເດັກທີ່ເຈົ້າຈະໃຫ້ກຳເນີດ" ຄຳໃນພາສາທີ່ຈະແປອາດຈະມີສຳນວນທີ່ແຕກຕ່າງສຳລັບຄຳນີ້.
- ອີກສຳນວນຄື "ຜົນຂອງອະງຸ່ນ" ສາມາດແປໄດ້ອີກວ່າ "ລູກອະງຸ່ນ" ຫຼື "ໝາກອະງຸ່ນ".
- ຄຳເວົ້າທີ່ວ່າ "ຈະມີຜົນຫຼາຍຂຶ້ນ" ສາມາດແປໄດ້ອີກວ່າ "ຈະເກີດຜົນຫຼາຍຂຶ້ນ" ຫຼື "ຈະມີບຸດຫຼາຍຂຶ້ນ" ຫຼື "ຈະເຣີນຮຸ່ງເຮືອງ" ທັງນີ້ຂຶ້ນຢູ່ກັບບໍຣິບົດນັ້ນ ໆ.
- ການກ່າວຂອງອັກຄະທູດໂປໂລ "ງານທີ່ເກີດຜົນຫຼາຍ" ສາມາດແປໄດ້ອີກວ່າ "ງານທີ່ທຳໃຫ້ເກີດຜົນດີ" ຫຼື "ຄວາມພະຍາຍາມທີ່ເຫັນຜົນໃນບັນດາຜູ້ສັດທາໃນພຣະເຢຊູ".
- "ຜົນຂອງພຣະວິນຍານ" ສາມາດແປໄດ້ອີກວ່າ "ການງານທີ່ພຣະວິນຍານບໍຣິສຸດຊົງໄດ້ກະທຳ" ຫຼື "ບັນດາຖ້ອຍຄຳແລະການກະທຳທີ່ສະແດງໃຫ້ເຫັນວ່າພຣະວິນຍານບໍຣິສຸດຊົງກຳລັງທຳງານໃນຕົວທ່ານ".


generated on Thu Jul 10 08:45:04 2025

## ຜ້າກະສອບ

### ນິຍາມ

ຜ້າກະສອບເປັນຜ້າທີ່ຫຍາບ, ເປັນຜ້າຊະນິດທີ່ທໍາໃຫ້ລະຄາຍເຄືອງທີ່ເຮັດຈາກຂົນແກະຫລືຂົນອູດ.

- ເສື້ອຜ້າທີ່ເຮັດຈາກຜ້າກະສອບຈະເຮັດໃຫ້ຄົນທີ່ນຸ່ງຫົ່ມຮູ້ສຶກບໍ່ສະດວກສະບາຍ,
  ເປັນການນຸ່ງຫົ່ມເພື່ອເປັນການສະແດງເຖິງຄວາມໂສກເສົ້າ,ເສຍໃຈ,ຫລືການຕ່ອມຕົວເສຍໃຈໃນຄວາມຜິດບາບ.
- ຄໍາເວົ້າວ່າ "ຜ້າກະສອບແລະຂີ້ເຖົ່າ"
  ເປັນຄໍາສັບຫົວໄປທີ່ອ້າງເຖິງການສະແດງອອກຕາມປະເພນີຂອງຄວາມໂສກເສົ້າແລະການເສຍໃຈໃນການຜິດບາບ.

%ຄໍາແນະນໍາໃນການແປ

- ຄໍານີ້ສາມາດແປວ່າ "ຜ້າກະສອບມາຈາກຂົນສັດ" ຫຼື "ຜ້າທີ່ເຮັດຈາກຂົນແກະ" ຫຼື "ຜ້າທີ່ມີຄວາມຫຍາບຄັນຄາຍ".
- ວິທີອື່ນທີ່ຈະແປຄໍານີ້ສາມາດແປລວມກັບ "ຜ້າທີ່ຫຍາບລະຄາຍເຄືອງ".
- ຄໍາເວົ້າທີ່ວ່າ "ນັ່ງໃນຜ້າກະສອບແລະຂີ້ເຖົ່າ" ສາມາດແປວ່າ
  "ເປັນການສະແດງຄວາມໂສກເສົ້າແລະຄວາມຕ່ອມໃຈໂດຍການນຸ່ງຫົ່ມຜ້າກະສອບແລະນັ່ງເທິງຂີ້ເຖົ່າ".

## ຜ້າກັ້ງ

### ນິຍາມ

ໃນພຣະຄໍາພີຄໍາວ່າ "ຜ້າກັ້ງ" ກ່າວເຖິງວັດສະດຸທີ່ໜາ ວັດສະດຸທີ່ໜັກຊຶ່ງໃຊ້ໃນການເຮັດຫໍເຕັ້ນແລະພຣະວິຫານ.

- ຫໍເຕັ້ນໄດ້ຖືກສ້າງດ້ວຍຜ້າກັ້ງສີຂຸ້ນສໍາຫລັບດ້ານເທິງແລະດ້ານຂ້າງ ຜ້າກັ້ງເຫຼົ່ານີ້ເຮັດຈາກຜ້າຫຼືໜັງສັດ.
- ຜ້າກັ້ງຖືກນໍາມາໃຊ້ເພື່ອເຮັດເປັນກໍາແພງຮອບລານຫໍເຕັ້ນ

ຜ້າກັ້ງເຫຼົ່ານີ້ເຮັດມາຈາກ"ລີນິນ" ຊຶ່ງເປັນຜ້າຊະນິດໜຶ່ງທີ່ເຮັດມາຈາກຕົ້ນປໍ.

- ທັ້ງໃນຫໍເຕັ້ນແລະພຣະວິຫານມີຜ້າກັ້ງໜາແຂວນຢູ່ລະຫວ່າງ

ສະຖານທີ່ສັກສິດແລະສະຖານທີ່ສັກສິດທີ່ສຸດ ຜ້າກັ້ງນີ້ຖືກຈີກອອກເປັນສອງສ່ວນຢ່າງໜ້າອັດສະຈັນເມື່ອພຣະເຢຊູສິ້ນພຣະຊົນ.

### ຄໍາແນະນໍາໃນການແປ

- ເນື່ອງຈາກຜ້າກັ້ງສະໄໝໃໝ່ມີຄວາມແຕກຕ່າງກັນຫຼາຍ

ກັບຜ້າກັ້ງທີ່ໃຊ້ໃນພຣະຄໍາພີ ຈຶ່ງອາດໃຊ້ຄໍາທີ່ຊັດເຈັນຫຼາຍຂຶ້ນ ເພື່ອໃຫ້ເຫັນຄວາມແຕກຕ່າງຫຼື ເພີ່ມຄໍາທີ່ຈະອະທິບາຍຜ້າກັ້ງຫຼາຍຂຶ້ນ.

- ວິທີການແປຄໍານີ້ອາດລວມເຖິງ "ຜ້າກັ້ງປົດ"ຫຼື " ຄອບຄຸມ"

ຫຼືຜ້າແຜ່ນໜາໆ " ຫຼື " ໜັງສັດຄອບຄຸມ" ຫຼື "ແຜ່ນຜ້າທີ່ແຂວນ"ທັ້ງນີ້ຂຶ້ນຢູ່ກັບກໍລະນີນັ້ນ ໆ.

## ຜ້າຄຸມ

### ນິຍາມ

ຄໍາວ່າ "ຜ້າຄຸມ" ໝາຍເຖິງຜ້າບາງໆ ທີ່ໃຊ້ຄຸມຫົວ ຫລືອັດໜ້າເພື່ອປົກປິດຫົວຫລືໃບໜ້າເພື່ອບໍ່ໃຫ້ເບິ່ງເຫັນ.

- ໂມເຊຄຸມໜ້າຂອງຕ່ານດ້ວຍຜ້າຄຸມຫລັງຈາກທີ່ໄດ້ຢູ່ຕໍ່ພຣະພັກພຣະຢາເວ,
  ດັ່ງນັ້ນຄວາມສະຫວ່າງຂອງໃບໜ້າຂອງຕ່ານຈະຖືກເຊື່ອງໄວ້ຈາກປະຊາຊົນ.
- ໃນພຣະຄໍາພີ, ຜູ້ຍິງໄດ້ສວມຜ້າຄຸມເພື່ອປົກປິດຫົວຂອງພວກນາງ ແລະໃບໜ້າຂອງພວກນາງດ້ວຍ,
  ເມື່ອພວກນາງຢູ່ໃນທີ່ສາທາລະນະຫລືໃນບ່ອນທີ່ມີພວກຜູ້ຊາຍ.
- ຄໍາກິລິຍາ "ຄຸມໜ້າ" ໝາຍເຖິງການປົກຄຸມບາງສິ່ງບາງຢ່າງດ້ວຍຜ້າຄຸມ.
- ໃນພຣະຄໍາພີພາສາອັງກິດບາງສະບັບ, ຄໍາວ່າ "ຜ້າຄຸມ" ໄດ້ໃຊ້ອ້າງເຖິງຜ້າກັ້ງໜາທີ


generated on Thu Jul 10 08:45:04 2025

ປົກຄຸມບໍລິເວນຫາງເຂົ້າໄປໃນບ່ອນສັກສິດທີ່ສຸດ. ແຕ່ "ຜ້າກັ້ງ" ເປັນຄໍາທີ່ຖືກຕ້ອງຫລາຍກວ່າໃນບໍລິບົດນັ້ນ, ເນື່ອງຈາກໝາຍເຖິງຜ້າໜັກໆ, ໜາໆ. % ຄໍາແນະນໍາໃນການແປ

- ຄໍາວ່າ "ຜ້າຄຸມ" ອາດຖືກແປເປັນ "ຜ້າຄຸມບາງ," ຫລື "ຜ້າຄຸມ," ຫລື "ຄຸມຫົວ."
- ໃນບາງວັດທະນະທໍາ, ເປັນຄໍາສໍາລັບຜ້າຄຸມໜ້າສໍາລັບຜູ້ຍິງ. ອາດຈໍາເປັນຕ້ອງຄົ້ນຫາຄໍາອື່ນເມື່ອໃຊ້ກັບໂມເຊ.

## ຜ້າປົກໜ້າເອິກ, ເຄື່ອງປ້ອງກັນໜ້າເອິກ

### ນິຍາມ

ຄໍາວ່າ“ ຜ້າປົກໜ້າເອິກ” ໝາຍເຖິງຊິ້ນສ່ວນປະຈໍາຕະກູນທີ່ປົກຄຸມດ້ານໜ້າຂອງໜ້າເອິກເພື່ອປົກປ້ອງທະຫານໃນລະຫວ່າງການສູ້ຮົບ. ຄໍາວ່າ“ ເຄື່ອງປ້ອງກັນໜ້າເອິກ” ໝາຍເຖິງສິ່ນເຄື່ອງນຸ່ງພິເສດທີ່ປະໂລຫິດໃຫຍ່ຂອງອິດສະລາແອນໃສ່ໃນສ່ວນຂອງໜ້າເອິກ.

- “ ຜ້າປົກໜ້າເອິກ” ທີ່ໃຊ້ໂດຍທະຫານສາມາດເຮັດດ້ວຍໄມ້, ໂລຫະ, ຫລື ໜັງສັດ. ມັນຖືກສ້າງຂຶ້ນເພື່ອປ້ອງກັນລູກສອນ, ຫອກຫລື ດາບຈາກການແທງໜ້າເອິກຂອງທະຫານ.
- “ ອຸປະກອນເສີມ” ທີ່ໃສ່ໂດຍປະໂລຫິດໃຫຍ່ຂອງອິດສະລາແອນແມ່ນເຮັດດ້ວຍຜ້າແລະມີແກ້ວປະເສີດທີ່ຕິດຢູ່ກັບມັນ. ປະໂລຫິດໄດ້ສວມໃສ່ສິ່ງນີ້ເມື່ອລາວປະຕິບັດໜ້າທີ່ໃນການຮັບໃຊ້ພຣະເຈົ້າໃນວິຫານ.
- ອີກວິທີໜຶ່ງທີ່ຈະແປ ຄໍາວ່າ "ຜ້າປົກໜ້າເອິກ" ສາມາດປະ ກອບມີ, "ການປົກປ້ອງໜ້າເອິກປ້ອງກັນໂລຫະ" ຫຼື "ຊຸດປະຈໍາ ຕະກູນປ້ອງກັນເອິກ."
- ຄໍາວ່າ“ ເຄື່ອງປ້ອງກັນໜ້າເອິກ” ສາມາດແປໄດ້ດ້ວຍຄໍາທີ່ມີຄວາມໝາຍວ່າ,“ ເຄື່ອງນຸ່ງປະໂລຫິດປົກໜ້າເອິກ” ຫລື“ ເຄື່ອງຕັດຫຍິບປະໂລຫິດ” ຫລື“ ເຄື່ອງນຸ່ງຂອງປະໂລຫິດ”.

## ຝັງ, ການຝັງ, ຖືກຝັງ

### ນິຍາມ

ຄໍາວ່າ“ ຝັງ” ປົກກະຕິແລ້ວແມ່ນ ໝາຍເຖິງການເອົາສົບຄົນຕາຍເຂົ້າໄປໃນຂຸມ ຫລື ບ່ອນຝັງສົບອື່ນໆ. ຄໍາວ່າ“ ຝັງ” ແມ່ນການກະທໍາຂອງການຝັງສິ່ງໃດສິ່ງ ໜຶ່ງ ຫລື ສາມາດໃຊ້ເພື່ອພັນລະນາສະຖານທີ່ທີ່ໃຊ້ໃນການຝັງບາງສິ່ງບາງຢ່າງ.

- ໂດຍທົ່ວໄປຄົນມັກຈະຝັງສົບຄົນຕາຍໂດຍເອົາມັນລົງໃນຂຸມເລິກໃນພື້ນດິນ ແລະ ຫຼັງຈາກນັ້ນປົກມັນດ້ວຍດິນ.
- ບາງຄັ້ງຮ່າງກາຍທີ່ຕາຍແລ້ວແມ່ນຖືກຈັດໃສ່ໃນໂຄງສ້າງທີ່ຄ້າຍຄືປ່ອງ, ເຊັ່ນ: ໂລງສົບກ່ອນທີ່ຈະຝັງມັນ.
- ໃນສະໄໝທີ່ຂຽນພຣະຄໍາພີ, ຄົນຕາຍມັກຖືກຝັງຢູ່ໃນຖ້ ໍ ຫລືບ່ອນທີ່ຄ້າຍຄືກັນ. ຫລັງຈາກພຣະເຢຊູສິ້ນຊີວິດແລ້ວ, ສົບຂອງພຣະອົງຖືກຫໍ່ດ້ວຍຜ້າແລະວາງໄວ້ໃນອຸບມຸງທີ່ຖືກອັດດ້ວຍຫີນກ້ອນໃຫຍ່.
- ຄໍາທີ່ວ່າ "ສະຖານທີ່ຝັງສົບ" ຂອງ "ຫ້ອງຝັງສົບ" ຫລື "ຫ້ອງຝັງສົບ" ຫລື "ຖ ້ ໍ ຝັງ" ແມ່ນວິທີການທັງໝົດທີ່ກ່າວເຖິງສະຖານທີ່ທີ່ຝັງສົບຂອງຄົນຕາຍ.
- ສິ່ງອື່ນໆກໍ່ສາມາດຝັງໄດ້ເຊັ່ນ: ເມື່ອອາການຝັງເງິນແລະສິ່ງອື່ນໆທີ່ລາວໄດ້ລັກມາຈາກເມືອງເຢຣິໂກ.
- ປະໂຫຍກທີ່ວ່າ "ຝັງສົບຂອງລາວ" ໂດຍປົກກະຕິຫມາຍຄວາມວ່າ, "ປົກຄຸມຫນ້າຂອງລາວດ້ວຍມືຂອງລາວ."
- ບາງຄັ້ງ ຄໍາວ່າ“ ປິດບັງ” ສາມາດໝາຍຄວາມວ່າ“ ຝັງ” ຄືກັບເມື່ອອາຄານເຊື່ອງສິ່ງທີ່ຢູ່ໃນພື້ນດິນທີ່ລາວໄດ້ລັກຈາກ ເມືອງເຢຣິໂກ. ນີ້ໝາຍຄວາມວ່າລາວໄດ້ຝັງພວກເຂົາຢູ່ໃນພື້ນດິນ.

## ຝັດເຂົ້າ, ຫ່ອນ

### ນິຍາມ

ຄໍາວ່າ "ຝັດເຂົ້າ" ແລະ "ຫ່ອນ" ໝາຍເຖິງການແຍກເມັດເຂົ້າອອກຈາກແກບຖົ່ມ. ໃນພຣະຄໍາພີ ຄໍາທັງສອງຄໍານີ້ກໍ່ໃຊ້ເປັນຄວາມປຽບທຽບໝາຍຄວາມວ່າການແຍກສິ່ງຂອງຫຼືແບ່ງຜູ້ຄົນອອກຈາກກັນ.

- "ຝັດເຂົ້າ " ໝາຍຄວາມວ່າແຍກເມັດເຂົ້າຈາກສິ່ງທີ່ບໍ່ຕ້ອງການໃນການກ້າຂອງປູກ ໂດຍການໂຍນທັງເມັດເຂົ້າແລະແກບຂຶ້ນໄປໃນອາກາດເພື່ອໃຫ້ລົມພັດແກບອອກໄປ.
- ຄໍາວ່າ "ຫ່ອນ" ໝາຍເຖິງການແຍກເມັດເຂົ້າແລະແກບໃນຖົ້ງຝັດເພື່ອຈະນໍາເອົາແກບອອກບໍ່ໃຫ້ເຫລືອປົນຢູ່ກັບເຂົ້າ.
- ໃນພັນທະສັນຍາເດີມ "ຝັດເຂົ້າ" ແລະ "ຫ່ອນ" ໃຊ້ເປັນຄວາມປຽບທຽບເພື່ອອະທິບາຍເຖິງຄວາມລໍາບາກທີ່ແຍກຄົນຊອຍທໍາອອກຈາກຄົນບໍ່ຊອບທໍາ.
- ພຣະເຢຊູຊຶ່ງໃຊ້ຄໍາອຸປະມາວ່າ "ຫ່ອນ" ດ້ວຍວິທີການປຽບທຽບນີ້ເມື່ອພຣະອົງຊົງບອກຊີໂມນເປໂຕວ່າພວກເຂົາແລະສາວົກຄົນອື່ນໆຈະໄດ້ຮັບການທົດລອງຄວາມສັດຊື່ຂອງພວກເຂົາໄດ້ຢ່າງໃດ.


generated on Thu Jul 10 08:45:04 2025

- ການແປຄຳຊັບເຫຼົ່ານີ ໃຫ້ໃຊ້ຄຳຫຼືຄຳທີ່ວ່າ ໃນພາສາທີ່ກຳລັງແປທີ່ໝາຍເຖິງກິດຈະກຳນີ ການແປທີ່ເປັນໄປໄດ້ເຊັ່ນ "ການແຍກ" ຫຼື "ການຜັດວີ" ຖ້າຝັດເຂົ້າ ຫຼືຫ່ອນເຂົ້າບໍ່ເປັນທີ່ຮູ້ຈັກ ດັ່ງນັ້ນ
  ຄຳຊັບເຫຼົ່ານີ້ອາດຈະແປໂດຍມີຄວາມໝາຍທີ່ຕ່າງກັນອອກໄປໃນການແຍກເມັດເຂົ້າອອກຈາກແກນຫຼື ຝຸ່ນ
  ຫຼືໂດຍການອະທິບາຍໃນເລື່ອງນີ.

## ຝາແຫ່ງການຄຶນດີ

### ນິຍາມ

" ຝາແຫ່ງການຄຶນດີ " ເປັນຝາທີ່ເຮັດຈາກຫອງຄຳເພື່ອໃຊ້ເປັນ ຝາປິດເທິງຫີບພັນທະສັນຍາ. ໃນພາສາອັງກິດຫລາຍສະບັບໃຊ້ຄຳນີ້ເອີ້ນວ່າ " ແຜ່ນປິດແຫ່ງການຄຶນດີ. "

- ຝາແຫ່ງການຄຶນດີມີຄວາມຍາວປະມານ115 ເຊັ່ນຕີແມັດແລະກວ້າງປະມານ 70 ເຊັ່ນຕີແມັດ
- ເທິງຝາແຫ່ງການຄຶນດີນັ້ນມີເຄຣຸບທອງຄຳສອງຮູບທີ່ມີປາຍປີກມາບັນຈຸກັນ.
- ພຣະຢາເວໄດ້ຊົງສັ່ງວ່າພຣະອົງຈະພົບຄົນອິສະຣາເອນເໜືອຝາແຫ່ງການຄຶນດີ, ພາຍໃຕ້ປີກທີ່ກາງອອກຂອງເຄຣຸບ,
  ມີພຽງມະຫາປະໂລຫິດເທົ່ານັ້ນທີ່ໄດ້ຮັບອະນຸຍາດໃຫ້ກະທຳການນີ, ໃນຖານະຕົວແທນຂອງປະຊາຊົນ.
- ບາງຄັ້ງຝາແຫ່ງການຄຶນດີນີ້ໄດ້ເອີ້ນວ່າ " ພຣະທີ່ນັ່ງກາຣຸນາ " ເພາະວ່າເປັນຊື່ພຣະເມດ ຕາ
  ຂອງພຣະເຈົ້າໃນການສະເດັດລົງມາເພື່ອໄຖ່ມະນຸດຄົນບາບ.

### ຂໍ້ແນະນຳໃນການແປ

- ໃນວິທີອື່ນຈະແປຄຳນີ້ກໍອາດຈະລວມເຖິງຄຳວ່າ "ຝາຫີບທີ່ພຣະເຈົ້າຊົງສັນຍາວ່າຈະໄຖ່ບາບ " ຫລື " ທີ່ພຣະເຈົ້າຊົງຄຶນດີ " ຫລື " ຝາຫີບທີ່ພຣະເຈົ້າຊົງໃຫ້ອະໄພແລະຊົງຮື້ຟື້ນຂຶ້ນໃໝ່. "
- ຫລືອາດຈະມີຄວາມໝາຍວ່າ " ສະຖານທີ່ແຫ່ງການປອບໂຍນ. "
- ໃຫ້ປຽບທຽບຄຳນີ້ກັບຄຳທີ່ທ່ານໃຊ້ແປຄຳວ່າ " ການຄຶນດີ " ການປອບໂຍນ " ຫລື " ການໄຖ່ບາບ."

## ຝູງ, ຝູງສັດ

### ນິຍາມ

ໃນພຣະຄັມພີ, "ຝູງ" ກ່າວເຖິງຝູງແກະຫລືຝູງແຢ້ແລະ "ຝູງສັດ" ກ່າວເຖິງຝູງຄວາຍ, ງົວ, ຫລື ໝູ.

- ພາສາທີ່ແຕກຕ່າງກັນອາດໃຊ້ຄຳທີ່ແຕກຕ່າງກັນໃນການເອີ້ນຝູງສັດຫລືນິກ.
- ຕົວຢ່າງເຊັ່ນ, ໃນພາສາອັງກິດ "ຝູງສັດ" ສາມາດໃຊ້ໄດ້ກັບແກະແລະແຢ້, ແຕ່ໃນພຣະຄັມພີປົກກະຕິແລ້ວບໍ່ມັກໃຊ້ແບບນີ.
- ຄຳວ່າ "ຝູງ" ໃນພາສາອັງກິດສາມາດໃຊ້ເອີ້ນຝູງນົກ, ແຕ່ບໍ່ສາມາດໃຊ້ສຳລັບໝູ, ຄວາຍ, ຫລືປະສຸສັດ.
- ໃຫ້ພິຈາລະນາຄຳທີ່ສາມາດໃຊ້ໄດ້ໃນພາສາຂອງທ່ານເພື່ອບົ່ງບອກເຖິງຄວາມແຕກຕ່າງໃນການເອີ້ນຝູງສັດແຕ່ລະຊະນິດ.
- ສຳລັບຂໍ້ຕ່າງໆ ທີ່ບົ່ງບອກເຖິງ "ຝູງແລະຝູງສັດ" ອາດຈະດີກວ່າຖ້າເພີ່ມຊື່ຂອງສັດເຂົ້າໄປດ້ວຍເຊັ່ນ, "ຂອງແກະ" ຫລື "ຂອງຄວາຍ" ຖ້າໃນພາສານັ້ນບໍ່ມີຄຳທີ່ແຕກຕ່າງກັນສຳລັບຊະນິດທີ່ແຕກຕ່າງຂອງຝູງສັດ.

## ຝູງແກະ, ແກະໂຕຜູ້, ແກະໂຕເມຍ

### ນິຍາມ

"ແກະ"ເປັນສັດຂະໜາດກາງທີ່ມີສີຂາມີຂົນຮອບຕົວ. ແກະເພດຜູ້ເອີ້ນວ່າ "ແກະໂຕຜູ້." ແກະເພດຍິງເອີ້ນວ່າ "ແກະໂຕເມຍ"

- ແກະໂຕນ້ອຍຈະເອີ້ນວ່າ "ລູກແກະ."
- ຫລາຍຄັ້ງທີ່ຊາວອິດສະຣາເອນໃຊ້ແກະໃນການຖວາຍບູຊາ, ໂດຍສະເພາະແມ່ນແກະໂຕຜູ້ທີ່ຍັງໜຸ່ມ.
- ຄົນຈະກິນຊີ້ນແກະແລະນຳຂົນແກະໄປເຮັດເປັນເສື້ອຜ້າແລະສິ່ງອື່ນໆ.
- ແກະເປັນສັດທີ່ຝັ່ງຄວາມ, ມັນອ່ອນແອ, ຂີ້ຢ້ານ. ພວກມັນຫລົງທາງໄດ້ງ່າຍ ພວກມັນຈຶ່ງຕ້ອງການຜູ້ລ້ຽງ.
  ເພື່ອຈະນຳແລະປົກປ້ອງພວກມັນ, ຫາອາຫານ, ນ້ຳດື່ມແລະບ່ອນພັກອາໄສໃຫ້ພວກມັນດ້ວຍ.
- ໃນພຣະຄຳພີ, ປະຊາຊົນຖືກປຽບທຽບກັບແກະຜູ້ທີ່ມີພຣະເຈົ້າເປັນຜູ້ລ້ຽງຂອງພວກເຂົາ.


generated on Thu Jul 10 08:45:04 2025

## ພຣະຄຣິດ,ພຣະເມສີອາ

### ນິຍາມ

ຄຳວ່າ "ພຣະເມສີອາ"ແລະ "ພຣະຄຣິດ" ຫມາຍເຖິງ" ຜູ້ທີ່ໄດ້ຮັບການຊົງເຈີມ" ແລະກ່າວເຖິງພຣະເຢຊູ ພຣະບຸດຂອງພຣະເຈົ້າ.

- ທັງຄຳວ່າ
  "ພຣະເມສີອາ"ແລະ"ພຣະຄຣິດ"ໃຊ້ໃນພັນທະສັນຍາໃຫມ່ທີ່ກ່າວເຖິງພຣະບຸດຂອງພຣະເຈົ້າຜູ້ທີ່ພຣະເຈົ້າພຣະບິດາຊົງແຕ່ງຕັ້ງເພື່ອໃຫ້ຄອບຄອງເປັນກະ
  ເຫນືອປະຊາກອນຂອງພຣະອົງແລະຊ່ວຍພວກເຂົາໃຫ້ລອດຈາກຄວາມບາບແລະຄວາມຕາຍ.
- ໃນພັນທະສັນຍາເດີມ
  ຜູ້ປະກາດພຣະທັມໄດ້ຂຽນຄຳປະກາດພຣະທັມກ່ຽວກັບພຣະເມສີອາໄວ້ຫລາຍຮ້ອຍປີກ່ອນທີ່ພຣະອົງຈະສະເດັດເຂົ້າມາໃນໂລກ..
- ຫລາຍຄັ້ງທີ່ຄຳຫມາຍຂອງຄຳວ່າ"(ຜູ້ທີ່) ໄດ້ຮັບການຊົງເຈີມ"

ໄດ້ໃຊ້ໃນພັນທະສັນຍາເດີມໃນການກ່າວເຖິງພຣະເມສີອາຜູ້ທີ່ຈະສະເດັດມາ.

- ພຣະເຢຊູຊົງເຮັດໃຫ້ຄຳປະກາດພຣະທັມເຫລົ່ານີ້ສຳເຣັດເປັນຈິງແລະເຮັດການອັດສະຈັນຫລາຍຢ່າງທີ່ເປັນການພິສູດ

ວ່າພຣະອົງຊົງເປັນພຣະເມສີອາຄຳກ່າວພະທັມເຫລົ່ານີ້ສຳເຣັດເມື່ອພຣະອົງສະເດັດກັບມາ.

- ຄຳວ່າ "ພຣະຄຣິດ" ມັກໃຊ້ເອີ້ນພຣະນາມ ຢ່າງເຊັ່ນ "ພຣະຄຣິດ"ແລ "ພຣະເຢຊູຄຣິດ" .
- "ພຣະຄຣິດ"ຖືກນຳມາໃຊ້ເປັນສ່ວນຫນຶ່ງຂອງພຣະນາມ ຢ່າງເຊັ່ນ "ພຣະເຢຊູຄຣິດ".

### ຄຳແນະນຳໃນການແປ

- ຄຳນີ້ສາມາດແປໄດ້ໂດຍການໃຊ້ຄວາມຫມາຍຂອງ "ຜູ້ຊົງຮັບການເຈີມ" ຫລື
  "ພຣະຜູ້ຊ່ວຍໃຫ້ລອດທີ່ໄດ້ຮັບການຊົງເຈີມຂອງພຣະເຈົ້າ"
- ຫລາຍພາສາທີ່ໃຊ້ຄຳແປທີ່ເບິ່ງເຫມືອນ ຫລື ຫນ້າຈະເຫມືອນ

"ພຣະຄຣິດ" ຫລື ພຣະເມສີອາ.

## ພຣະຄຳພີໃຫມ່

### ນິຍາມ

ຄຳວ່າ "ພຣະສັນຍາໃຫມ່"ອ້າງເຖິງຄຳໝັ້ນຫລືຂໍ້ຕົກລົງເຊິ່ງພຣະເຈົ້າໄດ້ເຮັດໄວ້ກັບປະຊາກອນຂອງ
ພຣະອົງດ້ວຍການຖວາຍບູຊາຂອງພຣະບຸດຂອງພຣະອົງຄືພຣະເຢຊູຄຣິດ.

- ''ໃນພຣະສັນຍາໃຫ່ມ''ຂອງພຣະເຈົ້າອະທິບາຍໃນສ່ວນຂອງພຣະຄຳພີທີ່ເອີ້ນວ່າ ພຣະສັນຍາໃຫມ່.
- "ພຣະສັນຍາໃໝ່ນີ້ຕ່າງກັນຂ້າມກັບຄຳວ່າ'' ພຣະສັນຍາເກົ່າ ''ຫຼື''ເດີມ
  ''ທີ່ພຣະເຈົ້າເຄີຍເຮັດໄວ້ກັບຊາວອິດສະຣາເອນໃນສະໄໝພຣະສັນຍາເດີມ.
- ພຣະສັນຍາໃໝ່ນັ້ນດີກວ່າພຣະສັນຍາເດີມ ເພາະວ່າມັນຕັ້ງຢູ່ເທິງການສະລະພຣະຊົນຂອງພຣະເຢຊູ
  ເຊິ່ງເປັນການໄຖ່ໃຫ້ຄົນພົ້ນຈາກຄວາມຜິດບາບຊົ່ວນິລັນ ແຕ່ການຖະຫວາຍບູຊາເຊິ່ງປາກົດໃນພຣະສັນຍາເດີມນັ້ນບໍ່ໄດ້ ເປັນເຊັ່ນນີ.
- ພຣະເຈົ້າໄດ້ຊົງຂຽນຄຳຫມັ້ນແຫ່ງພັນທະສັນຍາໃໝ່ໄວ້ໃນໃຈຂອງຜູ້ທີ່ເຊື່ອຫູກຄົນ
  ສິ່ງນີ້ເຮັດໃຫ້ພວກເຂົາຕ້ອງການທີ່ຈະເຊື່ອຟັງພຣະເຈົ້າແລະພວກເຂົາເລີມດຳເນີນຊີວິດໃຫ້ບໍຣິສຸດ.
- ພັນທະສັນຍາໃໝ່ຈະມີຜົນສົມບູນໃນເວລາສຸດທ້າຍເມື່ອພຣະເຈົ້າສະຖາປານາການປົກຄອງຂອງພຣະອົງເທິງແຜ່ນດິນໂລກ,
  ທຸກສິ່ງຈະກັບຄືນດີອີກເຫືອຄືຄັ້ງທຳອິດທີ່ພຣະອົງຊົງນິລະມິດສ້າງໂລກ.

### ຄຳແນະນຳໃນການແປ

- ຄຳວ່າ '' ພັນທະສັນຍາໃໝ່''ສາດມາດແປໄດ້ວ່າ''ການຕົກລົງກັນຢ່າງເປັນທາງການຄັ້ງໃໝ່'' ຫຼື ''ຄຳໝັ້ນໃໝ່'' ຫຼື'' ສັນຍາໃຫ່ມ''.
- ຄຳວ່າ'' ໃໝ່ ''ໃນຄຳກ່າວເຫຼົ່ານີ້ມີຄວາມໝາຍວ່າ'' ສົດ''ຫຼື ''ແບບໃໝ່ຂອງ'' ຫຼື ''ອີກຄົນໜຶ່ງ''.


generated on Thu Jul 10 08:45:04 2025

## ພຣະຄຸນ,ມີພຣະຄຸນ

### ນິຍາມ

ຄຳວ່າ "ພຣະຄຸນ" ຮ້ອງເຖິງການຊ່ວຍເຫຼືອຫລືຄຳອວຍພອນ ແກ່ຜູ້ທີ່ຍັງບໍ່ໄດ້ຮັບ. ຄຳວ່າ "ພຣະຄຸນ"
ຈະອະທິບາຍເຖິງຄົນທີ່ສະແດງພຣະຄຸນຕໍ່ຜູ້ອື່ນ.

- ພຣະຄຸນຂອງພຣະເຈົ້າຕໍ່ມະນຸດທີ່ເຕັມໄປດ້ວຍຄວາມບາບຄືຂອງຂວັນທີ່ໃຫ້ ໂດຍຫວັງບໍ່ຫວັງການຕອບແທນ.
- ແນວຄິດເລື່ອງພຣະຄຸນຍັງຮ້ອງເຖິງການເປັນຄົນທີ່ໃຈດີແລະໃຫ້ອະໄພຍບາງຄົນທີ່ເຮັດຜິດຫລືເຮັດສິ່ງທີ່ເຈັບປວດແກ່ຜູ້ອື່ນ.
- ຄຳກ່າວ "ສະແຫວງຫາພຣະຄຸນ"ເປັນຄຳກ່າວທີ່ໝາຍເຖິງ

ໄດ້ຮັບຄວາມຊ່ວຍເຫຼືອແລະຄວາມເມດຕາຈາກພຣະເຈົ້າ. ຫລາຍຄັ້ງລວມເຖິງພຣະເຈົ້າຊົງພໍພຣະທັຍໃນບາງຄົນທີ່ຊ່ວຍ ຄົນນັ້ນ.

%ຄຳແນະນຳໃນການແປ

- ອີກແນວທາງໃນການແປ "ພຣະຄຸນ" ສາມາດແປໄດ້ອີກວ່າ,

"ຄວາມເມດຕາຂອງພຣະເຈົ້າ" ຫລື "ເປັນທີ່ພໍໃຈພຣະເຈົ້າ" ຫລື "ຄວາມເມດຕາແລະການໃຫ້ອະໄພຍຂອງພຣະເຈົ້າແກ່ຄົນບາບ" ຫລື "ຄວາມເມດຕາຄຸນ".

- ຄຳວ່າ"ມີພຣະຄຸນ" ສາມາດແປວ່າ "ເຕັມໄປດ້ວຍພຣະຄຸນ"ຫລື "ກະລຸນາ" ຫລື "ເມດຕາກະລຸນາ".
- ຄຳກ່າວວ່າ," ເຂົາພົບພຣະຄຸນໃນສາຍພຣະເນດຂອງພຣະເຈົ້າ"ສາມາດແປໄດ້ອີກວ່າ,"ເຂົາໄດ້ຮັບພຣະເມດຕາຈາກພຣະເຈົ້າ "ຫລື "ພຣະເຈົ້າຊົງເມດຕາຊ່ວຍເຫຼືອເຂົາ" ຫລື ພຣະເຈົ້າຊົງສຳແດງຄວາມພໍໃຈແກ່ເຂົາ" ຫລື "ພຣະເຈົ້າພໍໃຈເຂົາແລະຊ່ວຍເຫຼືອເຂົາ."

.

## ພຣະທຳຂອງພຣະເຈົ້າ, ພຣະທຳຂອງພຣະຢາເວ, ພຣະທຳຂອງອົງພຣະຜູ້ເປັນເຈົ້າ, ພຣະຄຳພີ

### ນິຍາມ

ໃນພຣະຄຳພີຄຳວ່າ "ພຣະທຳຂອງພຣະເຈົ້າ" ໝາຍເຖິງສິ່ງທີ່ພຣະເຈົ້າຊົງເວົ້າຕໍ່ປະຊາຊົນ ນິຮວມເຖິງຂ້ຄວາມທີ່ພຣະເຈົ້າຕັດແລະຂຽນ
ພຣະເຢຊູຊົງຖືກເອີ້ນວ່າ "ພຣະທຳຂອງພຣະເຈົ້າ" ອີກດ້ວຍ.

- ຄຳວ່າ "ພຣະຄຳພີ " ໝາຍເຖິງ "ການຂຽນ" ໃຊ້ໂດຍສະເພາະໃນພັນທະສັນຍາໃໝ່ນັ້ນໝາຍເຖິງພຣະຄຳພີພາສາເຮັບເຣີ ຫຼື "ພັນທະສັນຍາເດີມ" ການຂຽນເຫຼົ່ານີ້ເປັນຂ້ຄວາມຂອງພຣະເຈົ້າທີ່ພຣະອົງຊົງບອກໃຫ້ຄົນຂຽນລົງໄປ
ດັ່ງນັ້ນຫຼາຍປີໃນອະນາຄົດປະຊາຊົນກໍຍັງສາມາດອ່ານໄດ້.
- ຄຳທີ່ກ່ຽວຂອງກັນ "ພຣະທຳຂອງພຣະຢາເວ" ແລະ "ພຣະທຳຂອງພຣະເຈົ້າ"
ບາງຄັ້ງມັກຈະເວົ້າເຖິງຂ້ຄວາມສະເພາະຈາກພຣະເຈົ້າທີ່ປະທານໃຫ້ແກ່ຜູ້ປະກາດພຣະທຳຂອງພຣະເຈົ້າຫຼືບຸກຄົນອື່ນໆ ໃນພຣະຄຳພີ.
- ບາງຄັ້ງຄຳນີ້ກໍໃຊ້ງ່າຍ "ພຣະທຳ" ຫຼື "ພຣະທຳຂອງພຣະເຈົ້າ" ຫລື

"ພຣະທຳຂອງພຣະອົງ" (ເມື່ອເວົ້າເຖິງພຣະຄຳຂອງພຣະເຈົ້າ).

- ໃນພັນທະສັນຍາໃໝ່ພຣະເຢຊູຊົງຖືກເອີ້ນວ່າເປັນ "ພຣະທຳ" ແລະ "ພຣະທຳຂອງພຣະເຈົ້າ"
ຊື່ເຫຼົ່ານີ້ໝາຍຄວາມວ່າພຣະເຢຊູຊົງເປີດເຜີຍພຣະອົງເອງວ່າພຣະເຈົ້ານັ້ນເປັນຜູ້ໃດ ເພາະພຣະອົງຊົງເປັນພຣະເຈົ້າເອງ.

### ຄຳແນະນຳໃນການແປ:

- ຂຶ້ນຢູ່ກັບກໍລະນີນັ້ນໆ ມີວິທີອື່ນໃນການແປສາມາດຮວມເຖິງ "ຂ້ຄວາມຂອງພຣະຢາເວ" ຫຼື "ຂ້ຄວາມຂອງພຣະເຈົ້າ" ຫຼື "ຄຳສອນຈາກພຣະເຈົ້າ."
- ໃນບາງພາສາອາດຈະມີຄວາມເປັນຫຳມະດາຫຼາຍກວ່າທີ່ຈະເຮັດໃຫ້ຄຳນີ້ເປັນພາບພົດແລະເວົ້າວ່າ "ເຫຼົ່າພຣະຄຳຂອງພຣະເຈົ້າ" ຫຼື "ກຸ່ມຄັ້ຍຄຳຂອງພຣະຢາເວ."
- ຄຳກ່າວທີ່ວ່າ "ພຣະທຳຂອງພຣະຢາເວມາເຖິງ" ມັກຈະໃຊ້ເພື່ອແນະ
ນຳສິ່ງທີ່ພຣະເຈົ້າຊົງສັ່ງກັບຜູ້ປະກາດພຣະທຳຫຼືປະຊາຊົນຂອງພຣະອົງ ນີ້ອາດຈະແປໄດ້ວ່າ "ພຣະຢາເວໄດ້ຊົງສັ່ງຂ້ຄວາມນີ" ຫຼື "ພຣະຢາເວຊົງສັ່ງຂ້ຄວາມເຫຼົ່ານີ."
- ຄຳວ່າ "ພຣະຄຳພີ" ຫຼື "ພຣະຄຳທັ້ງຫຼາຍ" ວ່າສາມາດແປ "ການຂຽນ " ຫຼື "ຂ້ຄວາມທີ່ໄດ້ບັນທຶກຈາກພຣະເຈົ້າ"
ຄຳນີ້ຄວນໄດ້ຮັບການແປແຕກ ຕ່າງຈາກຄຳແປຂອງຄຳທີ່ວ່າ "ພຣະທຳ."

- ເມື່ອ "ພຣະທຳ" ປາກົດຂຶ້ນພຽງຢ່າງດຽວອາດຈະແປວ່າ "ຂ້ຄວາມ" ຫຼື "ພຣະທຳຂອງພຣະເຈົ້າ" ຫຼື "ຄຳສອນ" ຂຶ້ນຢູ່ກັບກໍລະນີນັ້ນໆ ລອງພິຈາລະນາຄຳແປອື່ນທີ່ແນະນຳໄວ້ຂ້າງເທິງນີ້.

## ພຣະບັນຍັດ10ປະການ

### ນິຍາມ

"ພຣະບັດຍັດ10ປະການ"
ຄືຄຳສັ່ງທີ່ພຣະເຈົ້າໃຫ້ກັບໂມເຊເທິງພູເຂົາຊີນາຍລະຫວ່າງທີ່ພວກອິດສະຣາເອນໃຊ້ຊີວິດໃນທະເລຊາຍເພື່ອເດີນທາງໄປການາອານ
ພຣະເຈົ້າຊົງຂຽນພຣະບັນຍັດລົງເທິງແຜ່ນຫີນຂະນາດໃຫ່ຍສອງແຜ່ນ.

- ພຣະເຈົ້າໄດ້ປະທານບັນຍັດໃຫ້ຄົນອິດສະຣາເອນໄດ້ເຊື່ອຟັງ
  ແຕ່ບັນຍັດສິບປະການເປັນບັນຍັດພິເສດເພື່ອຊ່ວຍຊາວອິດສະຣາເອນໃຫ້ຮັກແລະນະມັດສະການພຣະເຈົ້າແລະຮັກຄົນອື່ນ.
- ພຣະບັນຍັດເຫລົ່ານີ້ຍັງເປັນສ່ວນພຣະສັນຍາຂອງພຣະເຈົ້າກັບປະຊາກອນຂອງພຣະອົງ
  ໂດຍການເຊື່ອຟັງໃນສິ່ງທີ່ພຣະເຈົ້າບັນຊາໃຫ້ທຳຄົນອິດສະຣາເອນສະແດງວ່າເຂົາຮັກພຣະເຈົ້າແລະເປັນຂອງພຣະອົງ.
- ແຜ່ນຫີນພ້ອມພຣະບັນຍັດໄດ້ຖືກຂຽນເທິງນັ້ນໄດ້ຖືກເກັບຮັກສາໄວ້ໃນຫີບແຫ່ງພຣະສັນຍາ ເຊິ່ງຕັ້ງໄວ້ໃນຫ້ອງບໍຣິສຸດໃນຫໍເຕັ້ນ
  ແລະຕໍ່ມາໄດ້ຕັ້ງໄວ້ໃນພຣະວິຫານ.

## ພຣະບຸດຂອງພຣະເຈົ້າ, ພຣະບຸດ, ບຸດ

### ນິຍາມ

ຄຳວ່າ "ພຣະບຸດຂອງພຣະເຈົ້າ" ອ້າງເຖິງພຣະເຢຊູ, ພຣະຄຳຂອງພຣະເຈົ້າໄດ້ເຂົ້າມາຍັງໃນໂລກໃນຖານະມະນຸດ.
ຫລາຍເທື່ອພຣະອົງຍັງຖືກອ້າງອີງໃຫ້ເປັນ "ພຣະບຸດ."

- ພຣະບຸດຂອງພຣະເຈົ້າມີພຣະລັກສະນະເຊັ່ນດຽວກັບພຣະເຈົ້າພຣະບິດາ, ແລະເປັນພຣະເຈົ້າຢ່າງຄົບບໍລິບູນ.
- ພຣະເຈົ້າພຣະບິດາ, ພຣະເຈົ້າພຣະບຸດ, ແລະ ພຣະວິນຍານບໍລິສຸດຊຶ່ງເປັນອົງດຽວກັນ.
- ບໍ່ເໝືອນກັບບຸດຊາຍຂອງມະນຸດ, ພຣະບຸດພຣະເຈົ້ານັ້ນຊົງດຳລົງຢູ່ເປັນນິດ.
- ເມື່ອເດີມນັ້ນ, ພຣະບຸດຂອງພຣະເຈົ້າ ຊົງເນລະມິດສ້າງໂລກຮ່ວມກັບພຣະບິດາແລະພຣະວິນຍານບໍລິສຸດ.
- ເພາະວ່າພຣະເຢຊູຊົງເປັນພຣະບຸດຂອງພຣະເຈົ້າ, ພຣະອົງຊົງຮັກແລະເຊື່ອຟັງພຣະບິດາຂອງພຣະອົງ,
  ແລະພຣະບິດາຂອງພຣະອົງຊົງຮັກພຣະອົງ

### ຄຳແນະນຳໃນການແປ

- ຄຳວ່າ, "ພຣະບຸດຂອງພຣະເຈົ້າ," ເປັນການດີທີ່ສຸດໃຫ້ແປ "ພຣະບຸດ"
  ດ້ວຍຄຳທີ່ຄືກັນພາສາຄວນໃຊ້ໃຫ້ເປັນຫຳມະຊາດເພື່ອອ້າງເຖິງບຸດມະນຸດ.
- ໃຫ້ແນ່ໃຈວ່າຄຳທີ່ໃຊ້ແປຄຳວ່າ "ບຸດ" ເໝາະສົມກັບຄຳທີ່ໃຊ້ແປຄຳວ່າ "ພຣະບິດາ"
  ແລະຄຳເຫລົ່ານີ້ເປັນຄຳທີ່ເປັນຫຳມະຊາດທີ່ໃຊ້ສະແດງເຖິງຄວາມສຳພັນລະຫວ່າງພຣະບິດາກັບບຸດໃນພາສາທີ່ແປ.
- ໃຫ້ໃຊ້ອັກສອນຕົວໃຫຍ່ເປັນຕົວອັກສອນເລີ່ມຕົ້ນຄຳວ່າ "ພຣະບຸດ" ຈະຊ່ວຍສະແດງວ່ານີ້ເປັນການເວົ້າເຖິງພຣະເຈົ້າ.
- ປະໂຫຍກທີ່ວ່າ "ພຣະບຸດ" ເປັນຮູບແບບທີ່ເຮັດໃຫ້ສັ້ນລົງຂອງຄຳວ່າ "ພຣະບຸດຂອງພຣະເຈົ້າ," ສະເພາະຢ່າງຍິ່ງເມື່ອໃຊ້ໃນປະ
  ໂຫຍກດຽວກັບຄຳວ່າ "ພຣະບິດາ."

## ພຣະປອມ, ພຣະຕ່າງຊາດ, ເທບ, ເທບທິດາ

### ນິຍາມ

ພຣະປອມແມ່ນບາງສິ່ງທີ່ຄົນທັ້ງຫລາຍນະມັດສະການແທນພຣະເຈົ້າອົງທ່ຽງແທ້. ຄຳວ່າ "ເທພີ" ໄດ້ເວົ້າເຖິງພຣະເຈົ້າປອມທີ່ເປັນ ເພດຍິງ.

- ພຣະປອມເຫລົ່ານີ້ ຫລືເທພີທີ່ບໍ່ມີຢູ່ຢ່າງແທ້ຈິງ ພຣະຢາເວເທົ່າ ນັ້ນແມ່ນພຣະເຈົ້າແຕ່ພຽງອົງດຽວ.
- ລາງເທື່ອຄົນໄດ້ສ້າງຮູບເຄົ້າລົບຈາກວັດຖຸເພື່ອຂາບໄຫວ້ນະມັດສະການ ສິ່ງເຫລົ່ານັ້ນເປັນພຣະເຈົ້າຂອງພວກເຂົາ.
- ໃນພຣະຄັມພີ ປະຊາກອນຂອງພຣະເຈົ້າມັກຈະຫັນໜີໄປ ບໍ່ເຊື່ອ ຟັງພຣະອົງ ເພື່ອໄປນະມັດສະການພຣະເຈົ້າປອມອື່ນໆ.
- ຫລາຍເທື່ອຜີຮ້າຍຈະຫລອກລວງຄົນໃຫ້ເຊື່ອສັດທາພຣະເຈົ້າປອມ ແລະຮູບເຄົ້າລົບຕ່າງໆ ວ່າພຣະເຈົ້າປອມເຫລົ່ານັ້ນມີຣິດເດດ.
- ພຣະບາອານ ພຣະດາໂກນ ແລະພຣະໂມເລັກ ແມ່ນພຣະສາມ ອົງໃນບັນດາພຣະເຈົ້າປອມທັ້ງຫລາຍທີ່ຄົນໄດ້ຂາບໄຫ້ວນະມັດສະ
  ການໃນສະໄໝພຣະຄັມພີເດີມ.
- ພຣະອາເຊຣາ ແລະອາເຕມິດ(ໄດນາ) ແມ່ນເທພີສອງອົງທີ່ຄົນ ໃນຍຸກສະໄໝໜູຮານຂາບໄຫ້ວນະມັດສະການ.


generated on Thu Jul 10 08:45:04 2025

### ຄຳແນະນຳການແປ

- ອາດຈະມີຄຳສຳລັບຄຳວ່າ "ພຣະ" ຫລື "ພຣະ" ຫລືພຣະປອມ" ຢູ່ ແລ້ວໃນພາສາທີແປ ຫລືພາສາທີໃກ້ຄຽງ.
- ຄຳວ່າ "ຮູບເຄົາລົບ" ອາດຈະໃຊ້ເພື່ອເວົ້າເຖິງພຣະເຈົ້າປອມ.
- ໃນພາສາອັງກິດ ຕົວອັກສອນທີ່ພິມຕົວນ້ອຍ "g" ໃຊ້ເພື່ອເວົ້າເຖິງພຣະເຈົ້າປອມ ແລະຕົວອັກສອນຕົວໃຫຍ່ "G" ເພື່ອເວົ້າເຖິງພຣະເຈົ້າອົງຫ່ຽງແທ້ອົງດຽວ ພາສາອື່ນໆ ອາດຈະເປັນເຊັ່ນນັ້ນ.
- ອີກຢ່າງນຶ່ງກໍຄື ການໃຊ້ຄຳທີ່ແຕກຕ່າງກັນຢ່າງສິ້ນເຊີງເພື່ອເວົ້າເຖິງພຣະເຈົ້າປອມ.
- ບາງພາສາອາດຈະເພີ່ມຄຳສະເພາະບາງຄຳ ອາດຈະເປັນພຣະເຈົ້າຫຽມ ພຣະເຈົ້າປອມ ທີ່ບັນລະຍາຍເປັນເພດຊາຍ ຫລືເພດຍິງ.

## ພຣະປະສົງຂອງພຣະເຈົ້າ

### ນິຍາມ

"ພຣະປະສົງຂອງພຣະເຈົ້າ" ເວົ້າເຖິງຄວາມຕ້ອງການແລະແຜນການຂອງພຣະເຈົ້າ.

- ພຣະປະສົງຂອງພຣະເຈົ້າ ໂດຍສະເພາະແມ່ນກ່ຽວຂ້ອງກັບການພົວພັນກັບຄົນອື່ນ ແລະການທີ່ພຣະອົງຕ້ອງການ ເພາະພຣະອົງຕ້ອງການໃຫ້ປະຊາຊົນຕອບສະໜອງຕໍ່ພຣະອົງຢ່າງໃດ.
- ຍັງເວົ້າເຖິງແຜນການຕ່າງໆ ຫຼືພຣະປະສົງຕ່າງໆຂອງພຣະອົງສຳລັບສິ່ງອື່ນໆ ໃນການຊົງສ້າງຂອງພຣະອົງ.
- ຄຳວ່າ " ພຣະປະສົງ" ໝາຍເຖິງ "ມຸ້ງໝັ້ນ" ຫຼື "ຕ້ອງການ."

### ຄຳແນະນຳໃນການແປ

- ພຣະປະສົງຂອງພຣະເຈົ້າ " ອາດຈະແປວ່າ "ສິ່ງທີ່ພຣະເຈົ້າຊົງຕ້ອງການ" ຫຼື "ສິ່ງທີ່ພຣະເຈົ້າໄດ້ຊົງວາງແຜນການໄວ້" ຫຼື "ວັດຖຸປະສົງຂອງພຣະເຈົ້າ" ຫຼື "ສິ່ງທີ່ພຣະເຈົ້າຊົງພໍພຣະໄທ."

## ພຣະຜູ້ຊ່ວຍໃຫ້ລອດ

### ນິຍາມ

ຄຳວ່າພຣະຜູ້ຊ່ວຍໃຫ້ລອດ "ອ້າງເຖິງບຸກຄົນຜູ້ທີ່ຊ່ວຍໃຫ້ລອດຫລືຊ່ວຍກູ້ຜູ້ອື່ນຈາກອັນຕະລາຍ
ແລະຍັງສາມາດອ້າງເຖິງບາງຄົນທີ່ໃຫ້ກຳລັງແກ່ຜູ້ອື່ນຫລືຈັດຕຽມສຳລັບພວກເຂົາ

- ໃນພັນທະສັນຍາເດີມ ພຣະເຈົ້າຖືກເວົ້າເຖິງວ່າເປັນພຣະຜູ້ຊ່ວຍໃຫ້ລອດຂອງຊົນຊາດອິດສະຣາເອນໃຫ້ພົ້ນຈາກສັດຕູຂອງພວກເຂົາ ແລະປະທານກຳລັງໃຫ້ພວກເຂົາ ແລະຈັດຕຽມສິ່ງທີ່ພວກເຂົາຕ້ອງການໃນການດຳເນີນຊີວິດ
- ໃນພັນທະສັນຍາໃຫມ່ ຄຳວ່າ "ພຣຜູ້ຊ່ວຍໃຫ້ລອດ" ໄດ້ໃຊ້ອະທິບາຍຫລືໃຊ້ເອີ້ນຕຳແໜ່ງຂອງພຣະເຢຊູຄຣິດ ເພາະວ່າພຣະອົງໄດ້ຊົງຊ່ວຍປະຊາຊົນຈາກການຖືກລົງໂທດຊົ່ວນິລັນດອນເພາະບາບຂອງພວກເຂົາພຣະອົງຍັງຊ່ວຍກູ້ພວກເຂົາໃຫ້ພົ້ນຈາກການຖືກຄວບ

%ຄຳອະທິບາຍໃນການແປ

- ຖ້າເປັນໄປໄດ້ "ພຣະຜູ້ຊ່ວຍໃຫ້ລອດ" ຄວນແປດ້ວຍຄຳທີ່ກ່ຽວຂ້ອງກັບຄຳວ່າ

"ຊ່ວຍເຫລືອ" ແລະ"ຊ່ວຍໃຫ້ລອດ"

- ວິທີທີ່ແປຄຳນີ້ສາມາດລວມ "ຜູ້ທີ່ຊ່ວຍ"ຫລື "ພຣະເຈົ້າຜູ້ຊົງຊ່ວຍ"ຫລືຜູ້ໄດ້ຊ່ວຍໃຫ້ພົ້ນຈາກອັນຕະລາຍ" ຫລື "ຜູ້ທີ່ຊ່ວຍເຫລືອຈາກຂ້າເສິກ" ຫລື"ພຣະເຢຊູຜູ້ນັ້ນທີ່ໄດ້ຊ່ວຍກູ້"

## ພຣະຜູ້ເປັນເຈົ້າ

### ນິຍາມ

ຄຳວ່າ " ພຣະຜູ້ເປັນເຈົ້າ " ໝາຍເຖິງຜູ້ໃດຜູ້ໜຶ່ງທີ່ມີສິດຄອບຄອງ ຫລື ສິດອຳນາເໜືອຜູ້ຄົນ. ເມື່ອຂຶ້ນຕົ້ນອັກສອນຕົວໃຫຍ່, ເປັນຕຳແໜ່ງທີ່ອ້າງເຖິງພຣະເຈົ້າ. ( ເຖິງຢ່າງໃດກໍຕາມໃຫ້ສັງເກດວ່າເມື່ອໃຊ້ເປັນຮູບແບບຂອງການເວົ້າກັບຜູ້ໃດຜູ້ໜຶ່ງ ຫຼື ໃນຕອນເລີ່ມຕົ້ນຂອງປະໂຫຍກມັນອາດຈະເປັນຕົວອັກສອນໃຫຍ່ ແລະ ມີຄວາມໝາຍຂອງ " ນາຍທ່ານ " ຫຼື " ນາຍ. " )

- ໃນພັນທະສັນຍາເດີມ, ຄຳສັບນີ້ຍັງຖືກນຳໃຊ້ໃນສຳນວນຕ່າງໆເຊັ່ນ: "ອົງພຣະຜູ້ເປັນເຈົ້າ. ພຣະຜູ້ເປັນເຈົ້າອົງສູງສຸດ " ຫລື " ອົງພຣະຜູ້ເປັນເຈົ້າ " ຫລື " ອົງພຣະຜູ້ເປັນເຈົ້າຂອງພວກເຮົາ."

- ໃນພັນທະສັນຍາໃໝ່, ພວກອັກຄະສາວົກໄດ້ໃຊ້ຄຳນີ້ໃນສ່ວນຕ່າງໆເຊັ່ນ " ພຣະເຢຊູຄຣິດ " ແລະ " ອົງພຣະເຢຊູຄຣິດ " ເຊິ່ງສື່ສານວ່າພຣະເຢຊູຄືພຣະເຈົ້າ.
- ຄຳວ່າ " ອົງພຣະຜູ້ເປັນເຈົ້າ " ໃນພັນທະສັນຍາໃໝ່ຍັງຖືກນຳໃຊ້ເປັນຄຳຄຸນງວ
ເພື່ອເປັນການເວົ້າເຖິງພຣະເຈົ້າໂດຍສະເພາະໃນຂໍ້ອ້າງອີງຈາກພຣະສັນຍາເດີມ. ຕົວຢ່າງເຊັ່ນ, ໃນພັນທະສັນຍາເດີມບອກວ່າ, "
ນະມັດສະການແດ່ພຣະອົງຜູ້ສະເດັດມາໃນນາມຂອງພຣະຢາເວ " ແລະ ໃນພັນທະສັນຍາໃໝ່ໄດ້ກ່າວວ່າ, "
ນະມັດສະການແດ່ພຣະອົງຜູ້ສະເດັດມາໃນນາມຂອງອົງພຣະຜູ້ເປັນເຈົ້າ."
- ໃນສະບັບ ULB ແລະ UDB ຕຳແໜ່ງ " ອົງພຣະຜູ້ເປັນເຈົ້າ " ຖືກແປໃນພາສາເປັນພາສາເຮັບເຣີ ແລະ ກຣີກ ໝາຍເຖິງ "
ອົງພຣະຜູ້ເປັນເຈົ້າ " ເທົ່ານັ້ນ ບໍ່ໄດ້ຖືກແປເປັນພຣະນາມຂອງພຣະເຈົ້າ ( ພຣະຢາເວ ) ຄືກັນກັບການແປໃນຫຼາຍສະບັບ

### ຄຳແນະນຳໃນການແປ

- ບາງພາສາແປຄຳນີ້ວ່າ " ນາຍ " ຫຼື " ຜູ້ປົກຄອງ " ຫຼືໃຊ້ຄຳອື່ນທີ່ສື່ເຖິງເຈົ້າຂອງ ຫຼື ຜູ້ປົກຄອງທີ່ມີອຳນາດສູງສຸດ
- ໃນບາງສະພາບການທີ່ເໝາະສົມ
ຄຳແປຫຼາຍສະບັບໃຊ້ຕົວອັກສອນໂຕໜາອຶດເປັນໂຕພິມໃຫຍ່ເພື່ອຈະເຮັດໃຫ້ຜູ້ອ່ານຈຳແນກອອກຢ່າງຊັດເຈນວ່າຄຳນັ້ນໝາຍເຖິງພຣະເຈົ້າ
- ມີຫຼາຍສະຖານທີ່ໃນພັນທະສັນຍາໃໝ່ທີ່ອ້າງເຖິງພັນທະສັນຍາເດີມ ຄຳວ່າ " ອົງພຣະຜູ້ເປັນເຈົ້າພຣະເຈົ້າ "
ສາມາດໃຊ້ເພື່ອຈຳແນກໄດ້ຢ່າງຊັດເຈນຄຳນັ້ນໝາຍເຖິງພຣະເຈົ້າ
- ບາງภาษาแปลคำนี้ว่า "นาย" หรือ "ผู้ปกครอง" หรือใช้คำอื่นที่สื่อถึงเจ้าของหรือผู้ปกครองที่มีอำนาจสูงสุด

## ພຣະຢາເວ

### ນິຍາມ

ຄຳວ່າ" ພຣະຢາເວ "ເປັນຊື່ສ່ວນຕົວຂອງພຣະເຈົ້າຊຶ່ງພຣະອົງຊົງປາກົດແກ່ໂມເຊທີ່ພຸ່ມໄມ້ທີ່ກຳລັງລຸກໄໝ້ຢູ່.

- ຊື່ " ພຣະຢາເວ" ມາຈາກຄຳທີ່ໝາຍເຖິງ" ເປັນຢູ່ " ຫລື "ດຳຣົງຢູ່".
- ຄວາມໝາຍທີ່ເປັນໄປໄດ້ຂອງ" ພຣະຢາເວ" ລວມທັ້ງ" ພຣະອົງຊົງເປັນ" ຫລື" ເຮົາເປັນ " ຜູ້ທີ່ຊົງສ້າງ".
- ຊື່ນີ້ເຜີຍໃຫ້ເຫັນວ່າພຣະເຈົ້າຊົງສະຖິດຢູ່ສະເໝີແລະຍັງດຳຣົງຢູ່ຕະລອດໄປເປັນນິດ ຍັງມີຄວາມໝາຍວ່າ
ພຣະອົງຊົງດຳຣົງຢູ່ເປັນນິດ.
- ຕາມຫຳນຽມການປະຕິບັດ ພຣະຄຳພີມີຫລາຍຄຳແປໃຊ້ຄຳສັບ "ອົງພຣະຜູ້ເປັນເຈົ້າ " ຫລື " ພຣະຜູ້ເຈົ້າ" ແທນທີ " ພຣະຍາເວ "
ລະບຽບການປະຕິບັດນີ້ເປັນຜົນຈາກຂໍ້ເຫັດຈິງທາງປະວັດສາດ ຄົນຢິວຢ້ານການອອກພຣະນາມຂອງພຣະຍາເວ ແລະນຳໄປໃຊ້ຄຳວ່າ
" ອົງພຣະຜູ້ເປັນເຈົ້າ "ທຸກຄັ້ງທີ່ເຫັນຄຳວ່າ " ພຣະຢາເວ" ປາກົດ ໃນພຣະຄຳພີສະໃໝ່ໃໝ່ໄດ້ຂຽນ " ອົງພຣະຜູ້ເປັນເຈົ້າ
"ດ້ວຍຕົວພິມໃຫຍ່ເພື່ອສະແດງຄວາມເຄົາລົບໃນພຣະນາມຂອງພຣະອົງເພື່ອໃຫ້ແຕກຕ່າງຈາກ "ພຣະເຈົ້າ
"ຊຶ່ງເປັນພາສາເຮັບເຣີຄຳອື່ນໆ.
- ພຣະຄຳພີ ULB ແລະ UDB ມັກແປຄຳນີ້ວ່າ " ພຣະຢາເວ " ຕາມທີ່ປາກົດໃນຂໍ້ຄວາມພາສາເຮັບເຣີໃນພັນທະສັນຍາເດີມ.
- ຄຳວ່າ "ພຣະຢາເວ " ບໍ່ມີປາກົດການເລີຍໃນຕົ້ນສະບັບຂອງພຣະຄຳພີພັນທະສັນຍາໃໝ່ ໃຊ້ພຽງຄຳພາສາກຣີກວ່າ "
ພຣະຜູ້ເປັນເຈົ້າ " ແມ່ແຕ່ໃນການອ້າງອີງພຣະຄຳພີພາກພັນທະສັນຍາເດີມ.

### ຄຳແນະນຳໃນການແປ

- " ພຣະຢາເວ " ສາມາດແປໂດຍຄຳຫລືວາລີທີ່ແປວ່າ " ພຣະອົງຊົງເປັນ " ຫລື " ພຣະອົງຊົງດຳຣົງຢູ່ " ຫລື " ພຣະອົງຜູ້ທີ່ເປັນ " ຫລື
" ພຣະອົງຜູ້ຊົງພຣະຊົນຢູ່".
- ຄຳນີ້ອາດຈະຂຽນໃນລັກສະນະທີ່ຄ້າຍເຄິງກັບຄຳສະກົດ " ພຣະຢາເວ".
- ຄຣິສຕະຈັກບາງນິກາຍບໍ່ມັກທີ່ຈະໃຊ້ຄຳ " ພຣະຢາເວ " ແລະໃຊ້ຄຳຕາມຫຳນຽມ " ອົງພຣະຜູ້ເປັນເຈົ້າ " ການພິຈາລະນາທີ່ສຳຄັນຄື
ນີ້ອາດຈະທຳໃຫ້ສັບສົນເມື່ອອ່ານອອກສຽງ ເພາະມັນຈະອອກສຽງເຊັ່ນດຽວກັບຄຳວ່າ " ພຣະຜູ້ເປັນເຈົ້າ "
ໃນບາງພາສາອາຈມີຄຳນຳໜ້າຫລືໝາຍເຫດທາງໄວຍະກອນທີ່ເພີ່ມເຂົ້າມາໃຫ້ເປັນຄວາມແຕກຕ່າງຂອງຄຳວ່າ "
ອົງພຣະຜູ້ເປັນເຈົ້າ".


generated on Thu Jul 10 08:45:04 2025

## ພຣະຢາເວຈອມເຈົ້າທັງປວງ, ພຣະເຈົ້າຈອມເຈົ້າທັງປວງ,ຈອມເຈົ້ານາຍ

### ນິຍາມ

ຄຳວ່າ " ພຣະຢາເວຈອມເຈົ້າ " ແລະ " ພຣະເຈົ້າຈອມທັງປວງ"
ເປັນຕຳແໜ່ງທີ່ສະແດງເຖິງອຳນາດສິດທິຂອງພຣະເຈົ້າເໜືອບັນດາທູດສະຫວັນນັບຫລາຍພັນທີ່ເຊື່ອຟັງພຣະອົງ.

- ຄຳວ່າ "ຈອມເຈົ້າ "ຫລື "ຈອມເຈົ້າທັງປວງ " ເປັນຄຳທີ່ໝາຍເຖິງສິ່ງຕ່າງໆ ຈຳນວນຫລາຍ
  ເຊັ່ນກອງທັບຂອງຄົນຫລືຈຳນວນດາວຈຳນວນມະຫາສານ ນີ້ສາມາດຍ້ອງຍີ່ງເຖິງດວງວິນຍານຕ່າງໆ ຈຳນວນຫລາຍ
  ລວມທັງວິນຍານຊົ່ວທັງຫລາຍນີ້ທ່ານໃຫ້ຊັດເຈນວ່າກຳລັງອ້າງເຖິງຫຍັງ.
- ຄຳວ່າ ທີ່ຄ້າຍຄືກັນ " ຈອມເຈົ້າແຫ່ງສະຫວັນ " ອ້າງເຖິງດາວທັງໝົດ ດາວເຄາະແລະສິ່ງຕ່າງໆ ແຫ່ງສະຫວັນ.
- ໃນພຣະສັນຍາໃໝ່ ຄຳທີ່ວ່າ "ອົງພຣະຜູ້ເປັນເຈົ້າຂອງຈອມເຈົ້າ " ມີຄວາມໝາຍເຊັ່ນດຽວກັນ "ພຣະຢາເວຈອມເຈົ້າທັງປວງ "
  ແຕ່ນີ້ບໍ່ສາມາດແປເຊັ່ນນັ້ນໄດ້ ເພາະພາສາເຮັບເຣີ "ພຣະຢາເວ " ບໍ່ໄດ້ໃຊ້ໃນພັນທະສັນຍາໃໝ່.

### ຄຳແນະນຳໃນການແປ

- ວິທີການແປຊື່ຕຳແໜ່ງ " ພຣະຢາເວຈອມເຈົ້າທັງປວງ " ສາມາດລວມເອົາ "ພຣະຢາເວຜູ້ຊົງປົກຄອງທູດສະຫວັນທັງປວງ " ຫລື "
  ພຣະຢາເວ ຜູ້ຊົງປົກຄອງກອງທັບຂອງທູດສະຫວັນ"ຫລື " ພຣະຢາເວ ຜູ້ຊົງປົກຄອງເໜືອການຊົງສ້າງ".
- ຄຳທີ່ວ່າ "ຈອມເຈົ້າທັງປວງ " ໃນຄຳຊັບ "ພຣະເຈົ້າຈອມເຈົ້າທັງປວງ" ແລະ" ອົງພຣະຜູ້ເປັນເຈົ້າທັງປວງ" ຈະແປເໝືອກັນໃນຄຳທີ່ວ່າ
  " ພຣະຢາເວຈອມເຈົ້າທັງປວງ" ຕາມຂ້າງຕົ້ນ.
- ຄຣິສຕະຈັກຫລາຍແຫ່ງບໍ່ຍອມໃຊ້ຄຳວ່າ " ພຣະຢາເວ " ແລະມັກທີ່ຈະໃຊ້ຄຳຊັບຕ່ຳວ່ອັກສອນໃຫຍ່ " ອົງພຣະຜູ້ເປັນເຈົ້າ "
  ແທນຕາມທຳນຽມຂອງພຣະຄຳພີຫລາຍໆ ຕອນ ສຳລັບຄຣິສຕະຈັກເຫລົ່ານີ້ການແປຄຳວ່າ " ອົງພຣະຜູ້ເປັນເຈົ້າຈອມເຈົ້າທັງປວງ "
  ຈະໃຊ້ພຣະຄຳພີພາກພັນທະສັນຍາເດີມ ສຳຫລັບ " ພຣະຢາເວຈອມເຈົ້າທັງປວງ".

## ພຣະຣາດຊະວັງ

### ນິຍາມ

ຄຳວ່າ "ພຣະຣາດຊະວັງ"
ອ້າງເຖິງອາຄານຫຼືບ້ານທີ່ເຊິ່ງກະສັດປະທັບຢູ່ພ້ອມດ້ວຍສະມາຊິກຣາດຊະວົງແລະບັນດາເຫລົ່າຂ້າຣາດຊະບໍລິພານ.

- ມະຫາປະໂລຫິດອາໃສຢູ່ບໍລິເວນພຣະຣາດຊະວັງເຊັ່ນດຽວກັນ, ດັ່ງທີ່ໄດ້ມີການກ່າວໄວ້ໃນພຣະສັນຍາໃໝ່.
- ພຣະຣາດຊະວັງຕ່າງໆ ຈະມີການຕົກແຕ່ງ ດ້ວຍສະຖາປັດຕິຍະກຳແລະເຄື່ອງເຮືອນທີ່ສວຍງາມ.
- ໂຕອາຄານແລະເຄື່ອງເຮືອນຂອງພຣະຣາດຊະວັງກໍ່ສ້າງດ້ວຍຫີນຫຼືໄມ້ ແລະຫຸ້ມດ້ວຍໄມ້ລາຄາແພງ ຄຳແລະງາຊ້າງ.
- ຄົນຈຳນວນຫຼາຍອາໃສຢູ່ແລະເຮັດວຽກບໍລິເວນພຣະຣາດຊະວັງ,ເຊິ່ງມັກຈະປະກອບໄປດ້ວຍອາຄານຫຼາຍອາຄານແລະເຕີມພຣະຣາຊະວັງ.

## ພຣະລັກສະນະຂອງພຣະເຈົ້າ,ລັກສະນະ

### ນິຍາມ

ຄຳວ່າ "ລັກສະນະ
"ອ້າງເຖິງບາງສິ່ງທີ່ເບິ່ງເຫມືອນສິ່ງອື່ນຫລືເຫມືອນບາງຄົນໃນບຸກຄະລິກລັກສະນະຫລືແກ່ນແທ້.ວາລີທີ່ວ່າ"ພຣະລັກສະນະຂອງພຣະເຈົ້າ
"ຖືກໃຊ້ໃນຫລາຍວິທີທາງ,ຂຶ້ນຢູ່ກັບກໍຣະນີ.

- ເມື່ອ
  ຕົ້ນເດີມນັ້ນພຣະເຈົ້າຊົງສ້າງມະນຸດຕາມ"ພຣະລັກສະນະຂອງພຣະເຈົ້າ"ນັ້ນຄື"ໃຫ້ເຫມືອນກັບພຣະອົງ"ນີ້ຫມາຍຄວາມວ່າຄົນເຮົາມີລັກສະນະພິເສດບາ
  ເຊັ່ນ
  ຄວາມສາມາດໃນການຮັບຮູ້ເຖິງອາລົມຕ່າງໆຄວາມສາມາດໃນການໃຫ້ເຫດຜົນແລະສື່ສານ,ແລະວິນຍານທີ່ດຳລົງຢູ່ຕລອດການ.
- ພຣະຄຳພີສອນວ່າພຣະເຢຊູ ພຣະບຸດຂອງພຣະເຈົ້າ ຄື "ພຣະລັກສະນະຂອງພຣະເຈົ້າ
  "ນັ້ນຄືພຣະອົງເອງຊົ່ງເປັນພຣະເຈົ້າ.ບໍ່ເຫມືອນກັບມະນຸດ ພຣະເຢຊູບໍ່ໄດ້ຖືກນິຣະມິດຂຶ້ນມາ. ຕລອດນິຣັນດອນ.. ພຣະເຈົ້າ
  ພຣະບຸດຊົ່ງມີພຣະລັກສະນະຂອງພຣະເຈົ້າທັງຫມົດເພາະວ່າພຣະອົງຊົ່ງສະພາບດຽວກັນກັບພຣະເຈົ້າພຣະບິດາ.

### ຄຳແນະນຳໃນການແປ

- ເມື່ອອ້າງເຖິງພຣະເຢຊູ,"ພຣະລັກສະນະຂອງພຣະເຈົ້າ "ສາມາດແປໄດ້ວ່າ "ຄວາມເຫມືອນກັບພຣະເຈົ້າທຸກປະການ " ຫຼື "ສະພາບດຽວກັນກັບພຣະເຈົ້າ " ຫຼື "ການດຳລົງຢູ່ເຊັ່ນດຽວກັນກັບພຣະເຈົ້າ "
- ເມື່ອອ້າງອີງເຖິງມະນຸດ, "ພຣະເຈົ້າຊົງສ້າງພວກເຂົາຕາມພຣະລັກສະນະຂອງພຣະອົງ " ສາມາດແປໄດ້ດ້ວຍກໍຣະນີ ທີ່ຫມາຍຄວາມວ່າ, "ພຣະເຈົ້າຊົງສ້າງພວກເຂົາໃຫ້ເຫມືອນພຣະອົງ " ຫຼື "ພຣະເຈົ້າຊົງສ້າງພວກເຂົາໃຫ້ມີບຸກຄະລິກລັກສະນະເຫມືອນພຣະອົງເອງ "

## ພຣະວິນຍານບໍລິສຸດ, ພຣະວິນຍານຂອງພຣະເຈົ້າ, ພຣະວິນຍານຂອງອົງພຣະຜູ້ເປັນເຈົ້າ

### ນິຍາມ

ຄຳເຫລົ່ານີ້ລ້ວນໝາຍເຖິງພຣະວິນນຍານບໍລິສຸດ, ຜູ້ຊຶ່ງເປັນພຣະເຈົ້າ.
ພຣະເຈົ້າທ່ຽງແທ້ພຽງອົງດຽວຊຶ່ງເປັນຢູ່ຕະຫລອດການໃນຖານະພຣະບິດາ, ພຣະບຸດ, ແລະພຣະວິນຍານບໍລິສຸດ.

- ພຣະວິນຍານບໍລິສຸດຍັງມີການອ້າງເຖິງວ່າເປັນ, "ພຣະວິນຍານ" ແລະ "ພຣະວິນຍານແຫ່ງພຣະຢາເວ" ແລະ "ພຣະວິນຍານແຫ່ງຄວາມຈິງ."
- ເພາະພຣະວິນຍານບໍລິສຸດຄືພຣະເຈົ້າ, ພຣະອົງຈຶ່ງຊົງບໍລິສຸດຢ່າງແທ້ຈິງ, ປະສະຈາກມົນທິນທັ້ງໝົດ, ແລະສົມບູນແບບໃນທາງສິນລະທຳໃນພຣະລັກສະນະໂດຍທຳມະຊາດທັ້ງໝົດຂອງພຣະອົງແລະທຸກສິ່ງທີ່ພຣະອົງຊົງກະທຳ.
- ຮ່ວມກັບພຣະບິດາ ແລະພຣະບຸດ, ພຣະວິນຍານບໍລິສຸດຊົງເນລະມິດສ້າງໂລກ.
- ເມື່ອພຣະບຸດຂອງພຣະເຈົ້າ, ພຣະເຢຊູສະເດັດກັບສູ່ສະຫວັນ, ພຣະເຈົ້າຊົງສົ່ງພຣະວິນຍານບໍລິສຸດມາຍັງຄົນຂອງພຣະອົງເພື່ອຈະນຳພວກເຂົາ, ສອນພວກເຂົາ, ປອບໂຢນພວກເຂົາ, ແລະຊ່ວຍໃຫ້ພວກເຂົາເຮັດຕາມນ້ຳພຣະໄທຂອງພຣະເຈົ້າໄດ້.
- ພຣະວິນຍານບໍລິສຸດຊົງນຳພຣະເຢຊູແລະພຣະອົງຊົງນຳຄົນເຫລົ່ານັ້ນທີ່ເຊື່ອໃນພຣະເຢຊູ.

### ຄຳແນະນຳໃນການແປ

- ຄຳນີ້ສາມາດແປໄດ້ງ່າຍໆ ດ້ວຍຄຳທີ່ໃຊ້ໃນການແປ "ບໍລິສຸດ" ແລະ "ພຣະວິນຍານ."
- ວິທີການທີ່ຈະແປຄຳນີ້ອາດລວມເຖິງ, "ພຣະວິນຍານບໍລິສຸດ" ຫລື "ພຣະວິນຍານທີ່ຊົງບໍລິສຸດ" ຫລື "ພຣະເຈົ້າພຣະວິນຍານ."

## ພຣະວິຫານ

### ນິຍາມ

ພຣະວິຫານເປັນອາຄານທີ່ຖືກອ້ອມຮອບດ້ວຍກຳແພງທີ່ຄົນອຶດສະຣາເອນມາອະທິຖານແລະຖວາຍເຄື່ອງບູຊາໃຫ້ແດ່ພຣະເຈົ້າ ພຣະວິຫານຕັ້ງຢູ່ທີ່ພູເຂົາໂມຣີອາດໃນກຸງເຢຣູຊາເລັມ.

- ປົກກະຕິແລ້ວຄຳວ່າ“ ພຣະວິຫານ” ໝາຍເຖິງສ່ວນປະກອບຂອງພຣະວິຫານທັ້ງໝົດ, ລວມທັ້ງສະໜາມຫຼວງທີ່ອ້ອມຮອບອາຄານຫຼັກ. ບາງຄັ້ງມັນໝາຍເຖິງອາຄານເທົ່ານັ້ນ.
- ອາຄານພຣະວິຫານມີຢູ່ສອງຫ້ອງ, ຄືຫ້ອງບໍຣິສຸດແລະຫ້ອງບໍຣິສຸດທີ່ສຸດ.
- ພຣະເຈົ້າໄດ້ອ້າງອີງພຣະວິຫານວ່າເປັນທີ່ປະທັບຂອງພຣະອົງ.
- ໃນສະໄໝຂອງກະສັດຊາໂລໂມນ ພຣະອົງໄດ້ຊົງສ້າງພຣະວິຫານ ເຊິ່ງເປັນສະຖານທີ່ຖາວອນທີ່ໃຊ້ນະມັດສະການພຣະເຈົ້າໃນກຸງເຢຣູຊາເລັມ.
- ໃນພຣະຄຳພີໃໝ່ຄຳວ່າ"ພຣະວິຫານຂອງພຣະວິນຍານບໍຣິສຸດ" ກໍໃຊ້ໝາຍເຖິງຫລົ່ານ້ຳຜູ້ທີ່ເຊື່ອໃນພຣະເຢຊູຄຣິດເຈົ້າເພາະພຣະວິນຍານບໍຣິສຸດສະຖິດຢູ່ກັບພວກເຂົາ.

### ຄຳແນະນຳໃນການແປ

- ໂດຍປົກກະຕິພຣະຄຳພີກ່າວວ່າປະຊາຊົນ "ຢູ່ໃນພຣະວິຫານ" ນີ້ໝາຍເຖິງພຣະວິຫານນອກອາຄານສາມາດແປໄດ້ວ່າ "ໃນລານພຣະວິຫານ" ຫຼື "ໃນສ່ວນປະກອບຂອງພຣະວິຫານ".
- ເມື່ອເວົ້າເຖິງອາຄານຕົວຂອງມັນເອງໂດຍສະເພາະ, ບາງຄຳ ແປຈະແປ "ພຣະວິຫານ" ເປັນ "ອາຄານພຣະວິຫານ", ເພື່ອເຮັດໃຫ້ມັນຈະແຈ້ງກ່ຽວກັບສິ່ງທີ່ຖືກກ່າວເຖິງ.
- ວິທີການແປ "ພຣະວິຫານ" ສາມາດລວມ "ບ້ານບໍຣິສຸດຂອງພຣະເຈົ້າ" ຫຼື"ສະຖານນະມັດສະການສັກສິດ".
- ຫລາຍຄັ້ງໃນພຣະຄຳພີ ພຣະວິຫານອ້າງເຖິງວ່າເປັນ"ບ້ານຂອງພຣະຢາເວ" ຫຼື "ບ້ານຂອງພຣະເຈົ້າ".


generated on Thu Jul 10 08:45:04 2025

## ພຣະສີຣິ, ພຣະສະຫງ່າຣາສີ

### ນິຍາມ

ຫົວໄປແລ້ວຄຳວ່າ, "ພຣະສີຣິ" ຫມາຍເຖິງກຽດ" ຄວາມສະຫງ່າງາມແລະຄວາມຍິ່ງໃຫຍ່ທີ່ສຸດ. ສິ່ງໃດກໍຕາມທີ່ມີພຣະສີຣິຄືການມີ "ສະຫງ່າຣາສີ." .

- ບາງຄັ້ງ "ພຣະສີຣິ" ອ້າງເຖິງບາງສິ່ງທີ່ມີຄຸນຄ່າຍິ່ງໃຫຍ່ແລະສຳຄັນໃນບໍຣິບົດຍືນກໍຄືການສື່ສານເຖິງຄວາມສະຫງ່າງາມ, ຄວາມສະຫວ່າງ,ແລະການຜິພາກສາ.
- ຕົວຢ່າງເຊັ່ນ, ປະໂຫຍກທີ່ວ່າ "ກຽດຂອງຄົນລ້ຽງແກະ" ໝາຍເຖິງທ້ຽຫຍ້າຂຽວສົດທີ່ແກະຂອງເຂົາໄດ້ມີກິນຢ່າງສົມບູນ.
- ພຣະສີຣິໂດຍສະເພາະແລ້ວຈະໃຊ້ເພື່ອອະທິບາຍເຖິງພຣະເຈົ້າ,ຜູ້ທີ່ຊົງສະຫງ່າຣາສີຫລາຍຍິ່ງກວ່າຜູ້ໃດຫລືສິ່ງໃດໃນຈັກກະວານນີ້. ທຸກສິ່ງໃນພຣະລັກສະນະຂອງພຣະອົງເປີດເຜີຍພຣະສີຣິແລະສະຫງ່າຣາສີຂອງພຣະອົງ.
- ຄຳກ່າວ "ຖວາຍພຣະສີຣິໃນ" ຫມາຍເຖິງການໂອ້ອວດໃນສິ່ງ

ນັ້ນຫລືການພາກພູມໃຈໃນບາງສິ່ງ.

### ຄຳແນະນຳການແປ

- ຂຶ້ນຢູ່ກັບບໍຣິບົດ, ທີ່ແຕກຕ່າງໃນການແປ "ພຣະສີຣິ"

ສາມາດລວມທັ້ງ "ສະຫງ່າຣາສີ"ຫລື "ຄວາມສະຫວ່າງ" ຫລື "ຫຍິ່ງໃຫຍ່ຕະການຕາ" ຫລື "ຫຍິ່ງໃຫຍ່" ຫລື "ມີຄຸນຄ່າຢ່າງຫຍິ່ງ.

- ຄຳວ່າ "ສະຫງ່າຣາສີ" ສາມາດແປ "ເຕັມພຣະສີຣິ" ຫລື "ມີຄ່າຫລາຍ" ຫລື" ສະຫວ່າງສະໄຫວ" ຫລື" ດີເລີດ."
- ຄຳກ່າວທີ່ວ່າ "ຖວາຍພຣະສີຣິແດ່ພຣະເຈົ້າ"ສາມາດແປໄດ້ວ່າ"ຖວາຍກຽດແລະຄວາມຫຍິ່ງໃຫຍ່ຂອງພຣະເຈົ້າ" ຫລື "ສັນຣະເສີນພຣະເຈົ້າເພາະຄວາມດີເລີດຂອງພຣະອົງ" ຫລື "ບອກຄົນອື່ນເຖິງຄວາມຫຍິ່ງໃຫຍ່ຂອງພຣະອົງ."

ຄຳກ່າວ "ພຣະສີຣິໃນ" ສາມາດແປວ່າ" ສັນຣະເສີນ" ຫລື" ພູມໃຈ ໃນ" ຫລື" ໂອ້ອວດ" ຫລື "ຊື່ນຊົມໃນ".

## ພຣະເຈົ້າ

### ນິຍາມ

ໃນພຣະຄັມພີ,ຄຳວ່າ "ພຣະເຈົ້າ" ອ້າງເຖິງຜູ້ທີ່ມີຊີວິດນິຣັນດອນ ຜູ້ຊົງສ້າງຈັກກະວານຄວາມຫວ່າງເປົ່າ.
ພຣະເຈົ້າຊົງເປັນຢູ່ໃນຖານະພຣະບິດາ, ພຣະບຸດ, ພຣະວິນຍານບໍຣິສຸດ. ພຣະນາມຂອງພຣະເຈົ້າຄື "ພຣະເຈົ້າຢາເວ"

- ພຣະເຈົ້າຊົງເປັນຢູ່ສະເໝີ;ພຣະອົງຢູ່ກ່ອນສິ່ງອື່ນໃດຈະເກີດຂຶ້ນແລະພຣະອົງຈະຢູ່ສະເໝີເປັນນິດ.
- ພຣະອົງຊົງເປັນພຣະເຈົ້າຜ່ຽງແຫ່ພຽງຜູ້ດຽວທີ່ມີອຳນາດເໜືອທຸກສິ່ງໃນຈັກກະວານ.
- ພຣະເຈົ້າຜ່ຽງທັມດີພອ້ມ ສະຕິປັນຍາຢ່າງຫລວງຫລາຍບໍຣິສຸດ

ບໍ່ມີບາບ ຍຸດຕິທັມ ເມດຕາແລະມີຄວາມຮັກ.

- ພຣະອົງເປັນພຣະເຈົ້າທີ່ຮັກສາຄຳສັນຍາແລະເຕີມເຕັມຄຳສັນຍາຂອງພຣະອົງສະເໝີ.
- ມະນຸດຖືກສ້າງມາເພື່ອນະມັດສະການພຣະເຈົ້າແລະພຣະອົງເປັນຜູ້ດຽວທີ່ພວກເຂົາຄວນສັນລະເສີນ.
- ພຣະເຈົ້າຊົງເປີດເຜີຍພຣະນາມຂອງພຣະອົງຄື"ພຣະເຈົ້າຢາເວ"ໝາຍເຖິງ"ພຣະອົງເປັນ" ຫລື "ເຮົາເປັນ" ຫລື "ຜູ້ຊົງເປັນຢູ່ເປັນນິດ.
- ພຣະຄັມພີກໍສອນເຖິງ "ພຣະ" ປອມດວ້ຍຊຶ່ງກໍຄືຮູບເຄົາລົບ

ທີ່ບໍ່ມີຊີວິດທີ່ຜູ້ຄົນຫລົງໄປນະມັດສະການແບບຜິດໆ.

%ຄຳແນະນຳການແປ

- ແນວທາງໃນການແປຄຳວ່າ "ພຣະເຈົ້າ" ສາມາດລວມທັ້ງ "ເທບ" ຫລື "ພຣະຜູ້ສ້າງ" ຫລື "ຜູ້ສູງສົ່ງ"
- ອີກແນວທາງໃນການແປຄຳວ່າ "ພຣະເຈົ້າ" ສາມາດລວມ "ພຣະຜູ້ສ້າງຜູ້ສູງສົ່ງ" ຫລື "ອົງອະທິປະໄຕນິຣັນດອນ" ຫລື ພຣະຜູ້ຊົງດຳລົງຢູ່ແລະພຣະຜູ້ສູງສົ່ງ."
- ພິຈາລະນາວ່າພຣະເຈົ້າຈະຖືກອ້າງເຖິງໃຊ້ພາສາທ້ອງຖິ່ນຫລືລະດັບຊາດແນວໃດ ນອກຈາກນີ້ອາດມີຄຳວ່າ "ພຣະເຈົ້າ" ຢູ່ໃນພາສາທີ່ແປແລ້ວຖ້າເປັນເຊັ່ນນັ້ນສິ່ງສຳຄັນຄືຕ້ອງກວດສອບໃຫ້ແນ່ໃຈວ່າຄຳນີ້ຖືກກັບລັກສະນະສະເພາະຂອງພຣະເຈົ້າອົງດຽວຢ່າງທີ່ອະທິບາຍໄວ້ເ
- ຫລາຍພາສາໃຊ້ຕົວໜັງສືຕົວທຳອິດເປັນຕົວໃຫຍ່ເພື່ອບົ່ງບອກເຖິງພຣະເຈົ້າຜູ້ຜ່ຽງແຫ່ແຕ່ອົງດຽວ ເພື່ອແຍກຄວາມແຕກຕ່າງຈາກຄຳເວົ້າຂອງພຣະປອມຫລືພຣະເຈົ້າ.


generated on Thu Jul 10 08:45:04 2025

- ອີກວິທີນຶ່ງທີ່ຈະເຮັດໃຫ້ເຫັນຄວາມແຕກຕ່າງນີ້ຄືການໃຊ້ຄຳ

ທີ່ແຕກຕ່າງຄືຄຳວ່າ "ພຣະເຈົ້າ" ແລະຄຳວ່າ "ພະ".

- ຄຳເວົ້າ "ເຮົາຈະເປັນພຣະເຈົ້າຂອງພວກເຂົາແລະພວກເຂົາຈະເປັນຄົນຂອງເຮົາ "ແປໄດ້ອີກວ່າ"
  ເຮົາຄືພຣະເຈົ້າຈະປົກຄອງເໜືອຄົນເຫຼົ່ານີ້ແລະພວກເຂົາຈະນະມັດສະການເຮົາ."

## ພຣະເຈົ້າ

### ນິຍາມ

ຄຳວ່າ "ພຣະເຈົ້າ" ກ່າວເຖິງບັນດາສິ່ງທີ່ກ່ຽວກັບພຣະເຈົ້າ.

- ບາງຄຳໃຊ້ຄຳນີ້ຮ່ວມດ້ວຍໄດ້ແກ່ "ສິດອຳນາດຂອງພຣະເຈົ້າ" " ການພິພາກສາຂອງພຣະເຈົ້າ" " ພຣະລັກສະນະຂອງພຣະເຈົ້າ" "
  ຣິດອຳນາດຂອງພຣະເຈົ້າ"ແລະ "ພຣະສະຫງ່າຣາສີຂອງພຣະເຈົ້າ".
- ໃນຂໍ້ຄວາມນຶ່ງຂອງພຣະຄັມພີຄຳວ່າ "ພຣະເຈົ້າ" ຖືກໃຊ້ເພື່ອອະທິບາຍສິ່ງທີ່ກ່ຽວກັບພຣະປອມ.

### ຄຳແນະນຳໃນການແປ

- ວິທີການແປຄຳວ່າ "ພຣະເຈົ້າ" ອາດລວມເຖິງ "ຂອງພຣະເຈົ້າ" ຫຼື "ຈາກພຣະເຈົ້າ" ຫຼື "ກ່ຽວຂ້ອງກັບຄຳວ່າພຣະເຈົ້າ" ຫຼື
  "ມີລັກສະນະຂອງພຣະເຈົ້າ".
- ຕົວຢ່າງເຊັ່ນ "ສິດທິອຳນາດຂອງພຣະເຈົ້າ" ອາດແປວ່າ "ອຳນາດຂອງພຣະເຈົ້າ" ຫຼື "ອຳນາດທີ່ມາຈາກພຣະເຈົ້າ".
- ຄຳເວົ້າ "ພຣະສະຫງ່າຣາສີຂອງພຣະເຈົ້າ" ສາມາດແປເປັນ "ພຣະສະຫງ່າຣາສີຂອງພຣະເຈົ້າ" ຫຼື
  "ພຣະສະຫງ່າຣາສີທີ່ພຣະເຈົ້າມີ" ຫຼື "ພຣະສະຫງ່າຣາສີທີ່ມາຈາກພຣະເຈົ້າ".
- ການແປບາງສະບັບອາດຕ້ອງການໃຊ້ຄຳອື່ນໃນການອະທິບາຍສິ່ງທີ່ກ່ຽວກັບພຣະປອມ.

## ພຣະເຈົ້າພຣະບິດາ,ພຣະບິດາໃນສະຫວັນ,ພຣະບິດາ

### ນິຍາມ

ຄຳວ່າ "ພຣະເຈົ້າພຣະບິດາ" ແລະ "ພຣະບິດາໃນສະຫວັນ" ອ້າງເຖິງພຣະເຈົ້າຢາເວ,ພຣະເຈົ້າຜູ້ຫ່ຽງແທ້ແຕ່ອົງດຽວ. ຄຳນີ້ບາງຄັ້ງ
ກໍເກີດຂຶ້ນດວ້ຍຄຳວ່າ "ພຣະບິດາ" ໂດຍສະເພາະເວລາທີ່ພຣະເຢຊູກຳລັງອ້າງເຖິງພຣະອົງ.

- ພຣະເຈົ້າທັງເປັນຢູ່ໃນຖານະພຣະເຈົ້າພຣະບິດາ ພຣະເຈົ້າພຣະບຸດແລະພຣະເຈົ້າພຣະວິນຍານບໍຣິສຸດ
  ແຕ່ລະພຣະອົງກໍຄືພຣະເຈົ້າຢ່າງສົມບູນແລະເປັນພຣະເຈົ້າອົງດຽວກັນ ນີເປັນເລື່ອງລຶກລັບທີ່ມະນຸດບໍ່ສາມາດເຂົ້າໃຈໄດ້.
- ພຣະເຈົ້າພຣະບິດາໄດ້ສົ່ງພຣະເຈົ້າພຣະບຸດ (ພຣະເຢຊູ)
  ມາໃນໂລກນີ້ແລະພຣະອົງໄດ້ສົ່ງພຣະວິນຍານບໍລິສຸດມາຍັງຄົນຂອງພຣະອົງ.
- ຜູ້ໃດທີ່ເຊື່ອໃນພຣະເຈົ້າພຣະບຸດຈະໄດ້ເປັນບຸດຂອງພຣະເຈົ້າ

ພຣະບິດາ,ແລະພຣະເຈົ້າພຣະວິນຍານບໍຣິສຸດຈະມາຢູ່ໃນຄົນນັ້ນ ນີອີກເປັນເລື່ອງລຶກລັບທີ່ມະນຸດບໍ່ສາມາດເຂົ້າໃຈໄດ້ທັງໝົດ.

### ຄຳແນະນຳການແປ

- ໃນຄຳເວົ້າທີ່ວ່າ "ພຣະເຈົ້າພຣະບິດາ" ຈະດີທີ່ສຸດຖ້າແປເປັນ"ພຣະບິດາ"
  ດ້ວຍຄຳດຽວກັນກັບພາສາທີ່ເປັນທັມະຊາດທີ່ໃຊ້ເພື່ອອ້າງເຖິງພໍ່ໃນແບບມະນຸດ.
- ຄຳວ່າ "ພຣະບິດາໃນສະຫວັນ ສາມາດແປໄດ້ອີກວ່າ "ພຣະບິດາຜູ້ຊົງສະຖິດໃນສະຫວັນ"
- ປົກກະຕິແລ້ວ "ພຣະບິດາ" ຈະໃຊ້ຕົວອັກສອນໃຫຍ່ເພື່ອສະແດງໃຫ້ເຫັນວ່າອ້າງເຖິງພຣະເຈົ້າ.


generated on Thu Jul 10 08:45:04 2025

## ພຣະເຢຊູ, ພຣະເຢຊູຄຣິດເຈົ້າ, ພຣະຄຣິດເຈົ້າເຢຊູ

### ນິຍາມ

ພຣະເຢຊູຊຶ່ງເປັນພຣະບຸດຂອງພຣະເຈົ້າພຣະນາມ "ເຢຊູ" ໝາຍເຖິງ ພຣະຢາເວຊົງຊ່ວຍໃຫ້ພົ້ນ. ຄຳວ່າ "ຄຣິດ" ແມ່ນຄຳທີ່ມີຄວາມໝາຍວ່າ
"ຜູ້ຖືກເຈີ່ມ" ແລະເປັນອີກຄຳໜຶ່ງທີ່ແປວ່າພຣະເມຊີອາ.

- ຊື່ທັ້ງສອງມັກຖືກລວມເຂົ້າກັນເປັນ "ພຣະເຢຊູຄຣິດເຈົ້າ"ຫລື "ພຣະຄຣິດເຈົ້າເຢຊູ."
  ຊື່ເຫລົ່ານີ້ເນັ້ນໜັກວ່າພຣະບຸດຂອງພຣະເຈົ້າເປັນພຣະເມຊີອາຜູ້ທີ່ສະເດັດມາຊ່ວຍປະຊາຊົນໃຫ້ພົ້ນຈາກການຖືກລົງໂທດນິຣັນດອນສຳຫລັບບາບທັ້ງຫລ
- ໃນການອັດສະຈັນພຣະວິນຍານບໍຣິສຸດເຈົ້າໄດ້ຊົງບັນດານໃຫ້ພຣະບຸດຂອງພຣະເຈົ້ານິຣັນດອນລົງມາບັງເກີດເປັນມະນຸດ.ພໍ່ແມ່ທີ່ຢູ່ໃນໂລກຂອງພຣະອົງຫ
  "ພຣະເຢຊູ" ຍ້ອນວ່າພຣະອົງມີຈຸດປະສົງທີ່ຈະຊ່ວຍມະນຸດທຸກຄົນໃຫ້ພົ້ນຈາກບາບທັ້ງຫລາຍຂອງພວກເຂົາ.
- ພຣະເຢຊູໄດ້ເຮັດການອັດສະຈັນຫລາຍຢ່າງຊຶ່ງສະແດງວ່າພຣະອົງຊົງເປັນພຣະເຈົ້າແລະພຣະອົງຊົງເປັນພຣະຄຣິດ, ຫລື
  ພຣະເມຊີອາ.

### ຄຳແນະນຳໃນການແປ

- ຫລາຍພາສາສະກົດ "ພຣະເຢຊູ" ແລະ "ພຣະຄຣິດ"
  ໃນແບບທີ່ຮັກສາຊື່ສຽງຫລືສະກົດໄວ້ໃຫ້ຢູ່ໃກ້ກັບຕົ້ນສະບັບຫລາຍທີ່ສຸດເທົ່າທີ່ເຮັດໄດ້. ຍົກຕົວຢ່າງ: "ເຢຊູຄຣິດໂຕ" "ເຢສູຄຣິດຕຸດ"
  "ເຢຊູຄຣິດ" "ເຢສູຄຣິດຕຸດ" ແລະ "ເຮສູຄຣິດໂຕ" ນີ້ແມ່ນບາງວິທີທີ່ຊື່ເຫລົ່ານີ້ຖືກແປເປັນພາສາຕ່າງໆ.
- ສຳຫລັບຄຳວ່າ, "ພຣະຄຣິດ," ບາງພາສາອາດຈະມັກໃຊ້ຮູບແບບຂອງຄຳວ່າ "ພຣະເມຊີອາ" ຕະຫລອດ.
- ຍັງພິຈາລະນາວິທີການສະກົດຊື່ເຫລົ່ານີ້ເປັນພາສາທ້ອງຖິ່ນຫລືພາສາປະເທດໃກ້ຄຽງ.

## ພວກນອກສາດສະໜາ

### ນິຍາມ

ໃນສະໄໝພຣະຄັມພີນັ້ນ ຄຳວ່າ "ພວກນອກສາດສະໜາ"
ໃຊ້ອະທິບາຍເຖິງຄົນທີ່ນະມັດສະການພຣະປອມແທນການນະມັດສະການພຣະເຈົ້າຢາເວ.

- ສິ່ງຕ່າງໆ ທີ່ກ່ຽວກັບຄົນກຸ່ມນີ້ ເຊັ່ນ ແທ່ນບູຊາທີ່ພວກເຂົານະມັດສະການ ພິທີກຳຫາງສາດສະໜາທີ່ພວກເຂົາປະຕິບັດ
  ຫຼືຄວາມເຊື່ອຂອງພວກເຂົາ ຖືກເອີ້ນວ່າ "ນອກສາດສະໜາ" ເຊັ່ນດຽວກັນ.
- ພວກນອກສາດສະໜາເຊື່ອໃນລະບົບທີ່ລວມໄປເຖິງການນະມັດສະການພຣະປອມຫຼືນະມັດສະການທຳມະຊາດ.
- ສາດສະໜາປອມບາງສາດສະໜາລວມໄປເຖິງພິທີກຳເຊິ່ງກ່ຽວກັບພິທີກຳຫາງເພດຫຼືການຂ້າຄົນເພື່ອເປັນສ່ວນນຶ່ງຂອງການນະມັດສະການ.

## ພວກສິບສອງຄົນ, ພວກສິບເອັດຄົນ

### ນິຍາມ

ຄຳວ່າ "ພວກສິບສອງຄົນ" ອ້າງເຖິງຜູ້ຊາຍສິບສອງຄົນທີ່ພຣະເຢຊູເຈົ້າໄດ້ເລືອກໃຫ້ເປັນສາວົກທີ່ໃກ້ຊິດຂອງພຣະອົງ, ຫຼືອັກຄະສາວົກ.
ຫລັງຈາກທີ່ຢູດາໄດ້ຂ້າຕົວຕາຍພວກເຂົາກໍ່ຖືກເອີ້ນວ່າ "ພວກສິບເອັດຄົນ".

- ພຣະເຢຊູມີສາວົກອື່ນໆອີກແຕ່ຕຳແໜ່ງ "ພວກສິບສອງຄົນ"
  ໄດ້ສະແດງຄວາມແຕກຕ່າງແກ່ບັນດາຜູ້ທີ່ຕິດຕາມພຣະອົງຕະຫລອດສາມປີຂອງພັນທະກິດ.
- ຊື່ຂອງສາວົກສິບສອງຄົນນີ້ໄດ້ຖືກລະບຸໄວ້ໃນມັດທາຍ 10, ມາຣະໂກ 3, ແລະລູກາ 6.
- ບາງຄັ້ງຫລັງຈາກພຣະເຢຊູສະເດັດສູ່ສະຫວັນ "ພວກສິບເອັດຄົນ"
  ໄດ້ເລືອກສາວົກຊື່ມັດທິອັດໄປແທ່ນທີ່ຢູດາແລ້ວພວກເຂົາຈຶ່ງຖືກເອີ້ນວ່າ"ພວກສິບສອງຄົນ" ອີກຄັ້ງໜຶ່ງ.

### ຄຳແນະນຳໃນການແປ

- ສຳຫລັບຫລາຍພາສາອາດຊັດເຈນຫຼືເປັນທຳມະຊາດຫລາຍຂຶ້ນໂດຍເພີ່ມຄຳນາມແລະເວົ້າວ່າ "ອັກຄະສາວົກສິບສອງຄົນ" ຫຼື
  "ສາວົກສິບສອງຄົນທີ່ໃກ້ຊິດກັບພຣະເຢຊູ".
- "ພວກສິບເອັດຄົນ" ສາມາດແປວ່າ "ສາວົກສິບເອັດຄົນຂອງພຣະເຢຊູທີ່ເຫລືອຢູ່".
- ການແປບາງສະບັບອາດຈະຕ້ອງການໃຊ້ຕົວອັກສອນໃຫຍ່ເພື່ອສະແດງໃຫ້ເຫັນວ່າມັນຖືກນຳໃຊ້ເປັນຫົວຂໍ້, ຄືກັບໃນ "ສິບສອງ" ແລະ
  "ສິບເອັດ."


generated on Thu Jul 10 08:45:04 2025

## ພວກຫົວໜ້າປະໂຣຫິດ

### ນິຍາມ

ພວກຫົວໜ້າປະໂຣຫິດເປັນຜູ້ນຳທາງສາສະໜາຂອງຊາວຢິວທີ່ສຳຄັນໃນຊ່ວງເວລາທີ່ພຣະເຢຊູຊົງດຳລົງຊີວິດຢູ່ເທິງແຜ່ນດິນໂລກ.

- ພວກຫົວໜ້າປະໂຣຫິດຮັບຜິດຊອບທຸກສິ່ງທີ່ຈຳເປັນສຳລັບການນະມັດສະການທີ່ພຣະວິຫານ, ພວກເຂົາຍັງມີໜ້າທີ່ຮັກສາເງິນທີ່ໄດ້ຖວາຍໃຫ້ກັບພຣະວິຫານດ້ວຍ.
- ພວກເຂົາຢູ່ໃນລະດັບສູງກວ່າແລະມີອຳຫລາຍກວ່າປະໂຣຫິດທົ່ວໄປ. ມີແຕ່ມະຫາປະໂຣຫິດເທົ່ານັ້ນທີ່ມີສິດອຳນາດເໜືອເຂົາ.
- ພວກຫົວໜ້າປະໂຣຫິດເປັນສັດຕູທີ່ສຳຄັນຂອງພຣະເຢຊູພວກເຂົາພະຍາຍາມຍຸຍົງ ໃຫ້ຜູ້ນຳຊາວໂຣມັນຈັບກຸມແລະຂ້າພຣະອົງ.

### ຄຳແນະນຳໃນການແປ

- ຄຳວ່າ "ພວກຫົວໜ້າປະໂຣຫິດ" ສາມາດແປໄດ້ວ່າ "ພວກປະໂຣຫິດຄົນສຳຄັນ" ຫຼື "ພວກຜູ້ນຳປະໂຣຫິດ" ຫຼື "ພວກປະໂຣຫິດທີ່ປົກຄອງ."
- ຂໍໃຫ້ແນ່ໃຈວ່າ ຄຳນີ້ແປແຕກຕ່າງຈາກຄຳວ່າ "ມະຫາປະໂຣຫິດ."

## ພວກເດັກ,ເດັກ,ລູກ

### ນິຍາມ

ໃນພຣະຄຳພີ ຄຳວ່າ "ເດັກ"ມັກຈະໃຊ້ໂດຍທົ່ວໄປທີ່ກ່າວເຖິງຄົນທີ່ຢູ່ໃນວັຍເດັກ ລວມເຖິງເດັກນ້ອຍດ້ວຍ ຄຳວ່າ "ພວກເດັກ"ເປັນຮູບພະຫູບົດ ແລະຍັງໃຊ້ເປັນຄຳປຽບທຽບດ້ວຍ.

- ໃນພຣະຄັມພີ ພວກສາວົກ ຫລືພວກຄົນທີ່ຕິດຕາມ ບາງຄັ້ງກໍເອີ້ນວ່າ "ພວກເດັກ".
- ຄຳວ່າ "ພວກເດັກ" ມັກຈະໃຊ້ຫມາຍເຖິງເຊື້ອສາຍຂອງບຸກຄົນ
- ຄຳເວົ້າ "ພວກຂອງເດັກ" ສາມາດໃຊ້ໃນຄວາມຫມາຍຂອງການບອກເປັນລັກສະນະຂອງບາງສິ່ງ ມີຕົວຢ່າງຂອງຄຳນີ້ຢູ່ເຊັ່ນ
- ພວກລູກຂອງຄວາມສະຫວ່າງ.
- ພວກລູກແຫ່ງການເຊື່ອຟັງ.
- ພວກລູກຂອງມານ.
- ຄຳນີ້ສາມາດເວົ້າເຖິງຄົນທີ່ກ່າວເຖິງພວກລູກຝ່າຍວິນຍານ

ກໍໄດ້ ຕົວຢ່າງເຊັ່ນ "ພວກລູກຂອງພຣະເຈົ້າ" ຊຶ່ງກ່າວເຖິງຄົນທີ່ເປັນຂອງພຣະເຈົ້າໂດຍທາງຄວາມເຊື່ອໃນພຣະເຢຊູ.

### ຄຳແນະນຳໃນການແປ

- ຄຳວ່າ "ພວກລູກ" ສາມາດແປໄດ້ວ່າ "ພວກເຊື້ອສາຍ" ເມື່ອຄຳນີ້ເມື່ອກ່າວເຖິງຄົນທີ່ເປັນເຫລັນ ຫລືໂຫລັນເປັນຕົ້ນ.
- "ພວກລູກຂອງເຂົາ" ສາມາດແປໄດ້ວ່າຄົນທີ່ມີລັກສະນະຂອງ"

ຫລື "ຄົນທີ່ເຮັດດີເໝືອນກັນ" ຂຶ້ນຢູ່ກັບບໍຣິບົດ.

- ຖ້າເປັນໄປໄດ້ ຄຳເວົ້າ "ພວກລູກຂອງພຣະເຈົ້າ" ຄວນແປຕາມຕົວໜັງສື ເນື່ອງຈາກຄວາມທີ່ສຳຄັນຕາມພຣະຄຳພີ ຄືພຣະເຈົ້າຊຶ່ງເປັນພຣະບິດາແຫ່ງສະຫັວນຂອງເຮົາ ການແປທີ່ເລືອກມາໃຊ້ໄດ້ອາດຈະເປັ້ນ" ຄົນທີ່ເປັ້ນຂອງພຣະເຈົ້າ" ພວກລູກຝ່າຍວິນຍານຂອງພຣະເຈົ້າ.
- ເມື່ອພຣະເຢຊູຊົງເອີ້ນພວກສາວົກຂອງພຣະອົງວ່າ"ພວກລູກ"

ຄຳນີ້ຄວນແປວ່າ "ພວກເພື່ອນຜູ້ສັດທາທີ່ຮັກ"ກໍໄດ້

- ຄຳເວົ້າ "ພວກລູກແຫ່ງພັນທະສັນຍາ" ສາມາດແປໄດ້ວ່າ "ຄົນທີ່ຮັບສິ່ງທີ່ພຣະເຈົ້າໄດ້ງສັນຍາກັບພວກເຂົາ.


generated on Thu Jul 10 08:45:04 2025

## ພະຍານ, ສັກຂີພະຍານ

### ນິຍາມ

ຄຳວ່າ " ພະຍານ " ໝາຍເຖິງບຸກຄົນຜູ້ທີ່ມີປະສົບການສ່ວນຕົວບາງຢ່າງທີ່ເກີດຂຶ້ນ
ໂດຍປົກກະຕິພະຍານເປັນບາງຄົນຜູ້ຊຶ່ງເປັນພະຍານໃນສິ່ງທີ່ພວກເຂົາວ່າເປັນຄວາມຈິງ ຄຳວ່າ " ສັກຂີພະຍານ "
ຈະໝາຍເຖິງຕົວບຸກຄົນນັ້ນຢູ່ທີ່ບ່ອນນັ້ນແທ້ໆ ແລະໄດ້ເຫັນວ່າມີຫຍັງໄດ້ເກີດຂຶ້ນ

- " ເພື່ອເປັນພະຍານ " ບາງສິ່ງບາງຢ່າງໝາຍຄວາມວ່າການເຫັນສິ່ງນີ້ເກີດຂຶ້ນ
- ໃນການພິຈາຣະນາຄະດີ ພະຍານ " ໃຫ້ການເປັນພະຍານ " ຫລື " ເປັນພະຍານ " ແມ່ນມີຄວາມໝາຍເຊັ່ນດຽວກັນ " ໃຫ້ການຢືນຢັນ "
- ພະຍານທັ້ງຫລາຍ ມີຄວາມຄາດຫວັງວ່າຈະບອກຄວາມຈິງກ່ຽວກັບສິ່ງທີ່ພວກເຂົາໄດ້ເຫັນຫລືໄດ້ຍິນ
- ພະຍານທີ່ບໍ່ໄດ້ບອກຄວາມຈິງກ່ຽວກັບສິ່ງທີ່ເກີດຂຶ້ນເອີ້ນວ່າ " "ພະຍານເວົ້າຄວາມເທັດ " ເຂົາຖືກກ່າວຫາວ່າ " ໃຫ້ການເປັນພະຍານເທັດ "ຫລື " ເປັນພະຍານເທັດ "
- ຖ້ອຍຄຳທີ່ວ່າ " ເປັນພະຍານລະຫວ່າງ " ໝາຍຄວາມວ່າບາງສິ່ງບາງຢ່າງຄົນມັກຈະມີຫລັກຖານວ່າທີ່ໄດ້ມີການເຮັດສັນຍາໄວ້ ພະຍານຈະແນ່ໃຈໄດ້ວ່າແຕ່ລະຄົນຈະເຮັດໃນສິ່ງທີ່ຕົນສັນຍາໄວ້

### ຄຳແນະນຳໃນການແປ

- ຄຳທີ່ວ່າ " ພະຍານ " ຫລື " ສັກຂີພະຍານ " ສາມາດແປດ້ວຍຄຳຫລືຖ້ອຍຄຳທີ່ມີຄວາມໝາຍວ່າ " ຄົນທີ່ໄດ້ເຫັນ " ຫລື " ຄົນທີ່ເຫັນເຫດການນີ້ເກີດຂຶ້ນ " ຫລື " ຄົນເຫລົ່ານັ້ນທີ່ໄດ້ເຫັນແລະໄດ້ຍິນ

## ພະຍານຕົວະ, ພະຍານຂີ້ສໍ້, ຫຼັກຖານຕົວະ, ລາຍງານຕົວະ

### ນິຍາມ

ຄຳວ່າ "ພະຍານຕົວະ" ແລະ "ພະຍານຂີ້ສໍ້" ກ່າວເຖິງຄົນທີ່ເວົ້າສິ່ງທີ່ບໍ່ເປັນຄວາມຈິງກ່ຽວກັບບຸກຄົນ
ຫຼືເຫດການໃນຮູບແບບທີ່ກຳນົດໄວ້ເຊັ່ນໃນສານ.

- ການເປັນ"ພະຍານຕົວະ" ຫຼື "ລາຍງານຕົວະ" ຄືການເວົ້າຫຼືສະເໜີຄວາມທີ່ບໍ່ເປັນຈິງຫຼືບໍ່ເວົ້າຄວາມຈິງເຖິງສິ່ງທີ່ກ່າວເຖິງ.
- ການ "ເປັນພະຍານຕົວະ" ໝາຍເຖິງການຂີ້ຕົວະຫຼືລາຍງານຄວາມບໍ່ຈິງກ່ຽວກັບບາງສິ່ງ.
- ພຣະຄັມພີມີເຫດການຫຼາຍຄັ້ງທີ່ເກີດຈາກພະຍານຂີ້ຕົວະຖືກໃຊ້ມາເວົ້າຕົວະກ່ຽວກັບບາງຄົນເພື່ອທຳໃຫ້ຄົນນັ້ນຖືກລົງໂທດຫຼືຖືກຂ້າ.

### ຄຳແນະນຳການແປ

- ການ "ເປັນພະຍານຂີ້ຕົວະ" ຫຼື "ໃຫ້ຫຼັກຖານຂີ້ຕົວະ" ສາມາດແປໄດ້ອີກວ່າ "ເປັນຫຼັກຖານບໍ່ຈິງ" ຫຼື "ລາຍງານບໍ່ຈິງກ່ຽວກັບບາງຄົນ" ຫຼື "ເວົ້າຕົວະຕໍ່ຕ້ານບາງຄົນ" ຫຼື "ຂີ້ຕົວະ."
- ເມື່ອ "ພະຍານຂີ້ຕົວະ" ກ່າວເຖິງບຸກຄົນ ສາມາດແປໄດ້ວ່າ "ຄົນທີ່ເວົ້າຂີ້ຕົວະ" ຫຼື "ຄົນທີ່ເປັນຫຼັກຖານຂີ້ຕົວະ" ຫຼື "ບາງຄົນທີ່ເວົ້າສິ່ງທີ່ບໍ່ເປັນຄວາມຈິງ."

## ພະນັກງານນ້ຳອາງຸ່ນ

### ນິຍາມ

ໃນສະໄໝພັນທະສັນຍາເດີມ"ພະນັກງານນ້ຳອາງຸ່ນ"ເປັນຂ້າຣາຊການຂອງກະສັດຜູ້ມີໜ້າທີ່ນຳຖວາຍຖ້ວຍເຫຼົ້າອາງຸ່ນຂອງພຣະອົງ
ໂດຍປົກກະຕິການຊິມວາຍກ່ອນ ເພື່ອໃຫ້ແນ່ໃຈວ່າບໍ່ໄດ້ມີການວາງຢາພິດ.

- ຄວາມໝາຍຕາມຕົວອັກສອນນີ້ຄື "ຜູ້ນຳຖ້ວຍ" ຫຼື "ຄົນທີ່ນຳຖ້ວຍມາໃຫ້"
- ຜູ້ນຳຖ້ວຍເປັນທີ່ຮູ້ຈັກໃນຖານະທີ່ໜ້າເຊື່ອຖືຫຼາຍ ແລະຈົ່ງຮັກພັກດີຕໍ່ກະສັດຂອງເຂົາ.
- ເນື່ອງຈາກຕຳແໜ່ງທີ່ເຊື່ອຖືໄດ້ຂອງເຂົາ ພະນັກງານນ້ຳອາງຸ່ນ ມັກຈະມີອິດທິພົນໃນການຕັດສິນໃຈຂອງຜູ້ປົກຄອງ.
- ເນຫະມີຢາ
ເປັນພະນັກງານນ້ຳອະງຸ່ນສຳລັບກະສັດອາເທເຊີຊີຊ ອາດແຫ່ງເປີເຊຍໃນລະຍະເວລາທີ່ຄົນອິດສະຣາເອນເປັນຊະເລີຍໃນບາບີໂລນ.


generated on Thu Jul 10 08:45:04 2025

## ພະບັນຍັດ,ກົດໝາຍ

### ນິຍາມ

ພະບັນຍັດເປັນກົດໝາຍທີ່ຂຽນເພື່ອເປັນລາຍລັກອັກສອນສຳລັບໃຫ້ຄຳແນະນຳແກ່ຄົນເຮົາໃນການດຳລົງຊີວິດ.

- ຄຳວ່າ "ພຣະບັນຍັດ" ມີຄວາມໝາຍຄ້າຍຄືກັນກັບ "ກົດ" ຫລື "ຄຳສັ່ງ" ຫລື "ກົດໝາຍ" ຫລື "ຄຳສັ່ງ" ຂໍ້ກຳໜົດທັງໝົດນີ້ກ່ຽວຂ້ອງກັບຄຳແນະນຳແລະພຣະປະສົງທີ່ພຣະເຈົ້າຊົງປະທານໃຫ້ແກ່ປະຊາຊົນຂອງພຣະອົງ.
- ກະສັດດາວິດໄດ້ກ່າວໄວ້ວ່າ ພຣະອົງມີຄວາມເຫັນດີໃນພຣະບັນຍັດຂອງພຣະຢາເວ.
- ຄຳວ່າ "ພຣະບັນຍັດ" ຍັງສາມາດແປເປັນ "ຄຳສັ່ງສະເພາະ" ຫລື "ຄຳສັ່ງພິເສດ".

## ພັກຜ່ອນ

### ນິຍາມ

ຄຳວ່າ "ພັກຜ່ອນ" ໝາຍເຖິງການຢຸດເຊົາເຮັດວຽກເພື່ອຜ່ອນຄາຍຫຼືກັບມາມີກຳລັງແຮງ. ຄຳວ່າ“ ສ່ວນທີ່ເຫຼືອ” ໝາຍເຖິງສິ່ງທີ່ຍັງເຫຼືອ.

- ຍັງສາມາດເວົ້າໄດ້ວ່າ "ພັກຜ່ອນ" ຢູ່ບ່ອນໃດບ່ອນໜຶ່ງຊຶ່ງໝາຍ ຄວາມວ່າມັນ "ຢືນຢູ່" ຫລື "ນັ່ງຢູ່".
- ເຮືອທີ“ ມາພັກຜ່ອນ” ຢູ່ບ່ອນໃດບ່ອນ ໜຶ່ງໄດ້“ ຢຸດ” ຫລື“ ລົງຈອດ” ຢູ່ທີ່ນັ້ນ.
- ເມື່ອຄົນຫລືສັດພັກຜ່ອນ, ມັນສາມາດໝາຍຄວາມວ່າພວກເ ຂົາກຳລັງນັ່ງຫລືນອນຢູ່ເພື່ອເຮັດໃຫ້ຕົນເອງສົດຊື່ນ.
- ພຣະເຈົ້າສັ່ງໃຫ້ຊາວອິສະຣາເອນພັກຜ່ອນໃນມື້ທີ່ເຈັດຂອງອາທິດ. ມື້ທີ່ບໍ່ເຮັດວຽກນີ້ຖືກເອີ້ນວ່າມື້ວັນສະບາໂຕ.
- ການພັກຜ່ອນວັດຖຸສິ່ງໃດສິ່ງ ໜຶ່ງ ໝາຍ ຄວາມວ່າ "ວາງ" ຫຼື "ວາງ" ຢູ່ບ່ອນນັ້ນ.

### ຄຳແນະນຳໃນການແປ

- ຂຶ້ນຢູ່ກັບບໍຣິບົດ, "ການພັກຜ່ອນ

## ພັນທະສັນຍາ

### ນິຍາມ

ພັນທະສັນຍາເປັນຂໍ້ຕົກລົງ, ຢ່າງເປັນທາງການແລະມີຜົນຜູກພັນລະຫວ່າງສອງຝ່າຍ ທີ່ຄູ່ສັນຍາຝ່າຍໜຶ່ງ ຫຼືທັ້ງສອງຝ່າຍຕ້ອງປະຕິບັດຕາມ.

- ຂໍ້ຕົກລົງນີ້ສາມາດທຳລະຫວ່າງບຸກຄົນ, ລະຫວ່າງກຸ່ມຄົນ, ຫຼື ລະຫວ່າງພຣະເຈົ້າກັບປະຊາຊົນ.
- ເມື່ອຄົນທຳສັນຍາຕໍ່ກັນແລະກັນ, ພວກເຂົາສັນຍາວ່າພວກເຂົາຈະທຳສິ່ງໃດໆ, ແລ້ວພວກເຂົາຕ້ອງທຳສິ່ງນັ້ນ.
- ຕົວຢ່າງພັນທະສັນຍາຂອງມະນຸດ ລວມເຖິງພັນທະສັນຍາການແຕ່ງງານ, ຂໍ້ຕົກລົງທາງທຸລະກິດ, ແລະສົນທິສັນຍາລະຫວ່າງປະເທດ.
- ຕະຫຼອດພຣະຄຳພີ, ພຣະເຈົ້າຊົງທຳພັນທະສັນຍາກັບປະຊາຊົນຂອງພຣະອົງຫຼາຍພັນທະສັນຍາທີ່ແຕກຕ່າງກັນ.
- ໃນບາງພັນທະສັນຍາ, ພຣະເຈົ້າໄດ້ຊົງສັນຍາວ່າ ຈະປະຕິບັດຕາມເງື່ອນໄຂຂອງພຣະອົງໂດຍບໍ່ມີເງື່ອນໄຂ. ຕົວຢ່າງເຊັ່ນ

ເມື່ອພຣະເຈົ້າຊົງກຳນົດພັນທະສັນຍາກັບມະນຸດຊາດ, ໂດຍສັນຍາວ່າຈະບໍ່ທຳລາຍໂລກອີກ ດ້ວຍນ້ຳຖ້ວມທົ່ວໂລກ, ສັນຍາ ນີ້ບໍ່ມີເງື່ອນໄຂສຳລັບຄົນທີ່ຈະທຳຕາມ.

- ໃນພັນທະສັນຍາອື່ນພຣະເຈົ້າໄດ້ຊົງສັນຍາວ່າ ຈະປະຕິບັດຕາມສ່ວນຂອງພຣະອົງ ສະເພາະເມື່ອຄັນດາປະຊາຊົນເຊື່ອຟັງພຣະອົງແລະປະຕິບັດຕາມພັນທະສັນຍາ ໃນສ່ວນຂອງພວກເຂົາ ທີ່ໄດ້ສັນຍາໄວ້ກັບພຣະອົງເທົ່ານັ້ນ.

### ຄຳແນະນຳໃນການແປ

- ວິທີການ, ແປຄຳນີ້ອາດລວມເຖິງ, " ຂໍ້ຕົກລົງທີ່ມີຜົນຜູກພັນ"

ຫຼື "ຄວາມມຸ່ງໝັ້ນຢ່າງເປັນທາງການ" ຫຼື" ຄຳໝັ້ນສັນຍາ" ຫຼື "ສັນຍາ." ທັງນີ້ຂຶ້ນຢູ່ກັບກໍລະນີນັ້ນໆ

- ບາງພາສາອາດມີຄຳທີ່ແຕກຕ່າງກັນສຳລັບຂໍ້ຕົກລົງ ຂຶ້ນຢູ່ກັບວ່າຝ່າຍໃດຝ່າຍໜຶ່ງ ຫຼື ທັ້ງສອງຝ່າຍໄດ້ທຳສັນຍາວ່າຈະຕ້ອງປະຕິບັດ. ຖ້າພັນທະສັນຍາເປັນແບບດ້ານດຽວ, ກໍສາມາດແປເປັນ "ສັນຍາ" ຫຼື"ຄຳໝັ້ນສັນຍາ."
- ກວດສອບໃຫ້ແນ່ໃຈວ່າຄຳແປຂອງຄຳນີ້ ບໍ່ໄດ້ເປັນການທີ


generated on Thu Jul 10 08:45:04 2025

ປະຊາຊົນສະເໝີຂໍ້ຕົກລົງ. ໃນທຸກກໍລະນີຂອງພັນທະສັນຍາ ລະຫວ່າງພຣະເຈົ້າກັບມະນຸດ, ພຣະເຈົ້າເປັນຜູ້ລິເລີ່ມພັນທະສັນຍານັ້ນ.

## ພາລະ

### ນິຍາມ

ພາລະ ແມ່ນພາລະໜັກ. ຕົວຈິງແລ້ວມັນໝາຍເຖິງພາລະທາງດ້ານຮ່າງກາຍເຊັ່ນສັດທີ່ເຮັດວຽກ.ຄຳວ່າ“ ພາລະ” ຍັງມີຄວາມໝາຍຫຼາຍຢ່າງ:

- ພາລະສາມາດໝາຍເຖິງໜ້າທີ່ຫຍຸ້ງຍາກ ຫລື ໜ້າທີ່ຮັບຜິດ ຊອບ ທີ່ສຳຄັນທີ່ບຸກຄົນຕ້ອງເຮັດ. ລາວໄດ້ຖືກກ່າວເຖິງວ່າ "ແບກ" ຫຼື "ແບກ" ພາລະຫນັກ.
- ຜູ້ນຳທີ່ໂຫດຮ້າຍອາດຈະເຮັດໃຫ້ພາລະທີ່ຫຍຸ້ງຍາກສຳລັບຄົນທີ່ລາວກຳລັງປົກຄອງ, ຍົກຕົວຢ່າງໂດຍບັງຄັບໃຫ້ເຂົາເຈົ້າຈ່າຍພາ ສີເປັນຈຳນວນຫລວງຫລາຍ.
- ຄົນທີ່ບໍ່ຢາກເປັນພາລະຂອງຄົນອື່ນບໍ່ຕ້ອງການທີ່ຈະເຮັດໃຫ້ຄົນອື່ນມີບັນຫາ.
- ຄວາມຜິດຂອງຄວາມຜິດຂອງຄົນເຮົາແມ່ນພາລະຂອງເຂົາ.
- "ພາລະຂອງພຣະຜູ້ເປັນເຈົ້າ" ແມ່ນວິທີການທີ່ເປັນໄປໄດ້ຂອງການກ່າວເຖິງ "ຂ່າວສານຈາກພຣະເຈົ້າ" ທີ່ປະກາດພຣະທຳຕ້ອງສືບຕໍ່ປະຊາຊົນຂອງພຣະເຈົ້າ.
- ຄຳສັບທີ່ວ່າ“ ພາລະໜັກ” ສາມາດແປໄດ້ໂດຍ“ ຄວາມຮັບຜິດ ຊອບ” ຫລື“ ໜ້າທີ” ຫລື“ ພາລະໜັກ” ຫລື“ ຂໍ້ຄວາມ,” ຂຶ້ນກັບສະພາບການ.

## ພາສີ,ພາສີອາກອນ

### ນິຍາມ

ຄຳວ່າ "ພາສີ" ຫຼື "ພາສີອາກອນ" ອ້າງເຖິງເງິນຫຼືສິນຄ້າຕ່າງໆ ທີ່ຜູ້ຄົນໄດ້ໃຫ້ແກ່ຜູ້ມີອຳນາດເໜືອພວກເຂົາ.

- ຈຳນວນເງິນທີ່ຕ້ອງຈ່າຍ ສຳລັບອາກອນແມ່ນອີງໃສ່ມູນຄ່າຂອງສິ່ງຂອງຫຼືຊັບສິນຂອງບຸກຄົນທີ່ມີມູນຄ່າເທົ່າໃດ.
- ຖ້າຜູ້ໃດບໍ່ໄດ້ຊຳຣະພາສີຕ່າງໆ,ລັດທະບານສາມາດດຳເນີນການຕາມກົດໝາຍຕໍ່ບຸກຄົນນັ້ນ ເພື່ອຈະໄດ້ຮັບເງິນຈາກຜູ້ທີ່ເປັນໜີ້ລັດທະບານນັ້ນ.
- ໂຢເຊັບແລະມາຣີໄດ້ເດີນທາງໄປເມືອງເບັດເລເຮັມເພື່ອຈະຖືກນັບເຂົ້າໃນການສຳຫຼວດພົນລະເມືອງທີ່ມີຈຸດປະສົງເພື່ອເກັບພາສີທຸກຄົນທີ່ອາໄສຢູ່ໃນອານາ
- ນອກນັ້ນຍັງມີ "ອາກອນໃນພຣະວິຫານ" ເຊິ່ງເປັນເງິນທີ່ຜູ້ຄົນເອົາໃສ່ໃນກ່ອງຖວາຍຂອງວິຫານ. ເງິນຈຳນວນໜຶ່ງນີ້ແມ່ນໃຊ້ເພື່ອດູແລອາຄານຂອງພຣະວິຫານ.
- ຄຳວ່າ "ພາສີ"ສາມາດແປວ່າ "ພາສີບັງຄັບ" ຫຼື "ເງິນຂອງລັດທະບານ" ຫຼື "ເງິນຂອງພຣະວິຫານ" ຂຶ້ນຢູ່ກັບສະຖານະການ.
- ປະໂຫຍກເຊັ່ນ, "ເກັບພາສີ" ແລະ "ພາສີອາກອນຈ່າຍ" ຍັງສາມາດແປເປັນ "ຈ່າຍເງິນໃຫ້ລັດຖະບານ" ຫຼື "ຮັບເງິນໃຫ້ລັດຖະບານ" ຫຼື "ຈ່າຍເງິນທີ່ຕ້ອງການ."
- "ຄົນເກັບພາສີ" ເປັນຜູ້ທີ່ເຮັດວຽກໃຫ້ແກ່ລັດທະບານໃນການຮັບເງິນທີ່ປະຊາຊົນຈຳເປັນຕ້ອງຈ່າຍໃຫ້ພວກເຂົາ.

## ພິນນ້ຳເຕົ້າ ແລະ ພິນ

### ນິຍາມ

ພິນນ້ຳເຕົ້າ ແລະ ພິນເປັນເຄື່ອງດົນຕີໃຊ້ສາຍຂະໜາດນ້ອຍທີ່ຄົນອິດສເອນໃຊ້ເພື່ອນະມັດສະການພຣະເຈົ້າ

- ພິນນີ້ຄ້າຍຄືພິນຕ້າຂະໜາດນ້ອຍ ມີກອບທີ່ເອົາໄວ້ໃຫ້ສາຍພິນເຊິ່ງຂ້າມໄປມາ
- ພິນນ້ຳເຕົ້າມີລັກສະນະນ້ອຍກວ່າກີຕ້າໂປ່ງສະໄໝໃໝ່ ມີກ່ອງເປັນໄມ້ ແລະ ຄໍຍາວທີ່ມີສາຍພິນເຄັ່ງໄວ້
- ການຫຼີ້ນພິນນ້ຳເຕົ້າ ແລະ ພິນ ສາຍຂອງພິນຈະໃຊ້ນິ້ວຂອງມືຂ້າງໜຶ່ງກົດລົງບົນສາຍພິນ ແລະ ອີກມືໜຶ່ງຈັບດຶງສາຍພິນດີດບັນເລງ
- ພິນນ້ຳເຕົ້າ ພິນ ແລະ ພິນຕ້ັງ ຫຼີ້ນໂດຍການດີດສາຍຂອງເຄື່ອງດົນຕີ
- ຈຳນວນຂອງສາຍພິນມີຫຼາຍແບບ ແຕ່ໃນພັນທະສັນຍາເດີມ ລະບຸວ່າເຄື່ອງດົນຕີມີສິບສາຍ

## ພິພາກສາ, ຜູ້ພິພາກສາ, ການຕັດສິນ

### ນິຍາມ

ຄຳວ່າ “ພິພາກສາ“ ແລະ “ການຕັດສິນ“ ມັກຈະກ່າວເຖິງການຕັດສິນໃຈກ່ຽວກັບບາງສິ່ງບາງຢ່າງທີ່ຖືກຕ້ອງຫຼືຜິດ.

- “ການພິພາກສາຂອງພຣະເຈົ້າ“ ມັກຈະໝາຍເຖິງການຕັດສິນໃຈຂອງພຣະອົງເພື່ອຈະລົງໂທດບາງຢ່າງຫຼືບາງຄົນທີ່ເຮັດບາບ.


generated on Thu Jul 10 08:45:04 2025

- ການພິພາກສາຂອງພຣະເຈົ້າມັກຈະປະກອບມີການລົງໂທດຜູ້ຄົນທີ່ເຮັດບາບຂອງພວກເຂົາ.
- ຄໍາວ່າ “ພິພາກສາ" ຍັງໝາຍເຖິງ “ການກ່າວໂທດ.“ ພຣະເຈົ້າສັ່ງປະຊາຊົນຂອງພຣະອົງຢ່າຕັດສິນເຊິ່ງກັນແລະກັນໃນເລື່ອງນີ້.
- ຄວາມໝາຍອີກຢ່າງໜຶ່ງແມ່ນ “ການຕັດສິນຊີ້ຂາດລະຫວ່າງ“ ຫລື “ຜູ້ພິພາກສາລະຫວ່າງ“, ຄືກັບການຕັດສິນໃຈວ່າຄົນໃດຖືກໃນການຂັດແຍ້ງລະຫວ່າງພວກເຂົາ.
- ໃນສະພາບການບາງຢ່າງ, “ການພິພາກສາ“ ຂອງພຣະເຈົ້າເປັນສິ່ງທີ່ພຣະອົງໄດ້ຕັດສິນໃຈວ່າຖືກຕ້ອງແລະຍຸຕິທໍາ. ຄ້າຍຄືດໍາລັດ, ກົດໝາຍ, ຫລືກົດເກນ.
- “ ການຕັດສິນ“ ສາມາດໝາຍເຖິງຄວາມສາມາດໃນການຕັດສິນໃຈທີ່ສະຫລາດ. ບຸກຄົນທີ່ຂາດ “ການຕັດສິນໃຈ “ ບໍ່ມີປັນຍາໃນການຕັດສິນໃຈທີ່ສະຫລາດ.

### ຄໍາແນະນໍາ ໃນການແປ

- ອີງຕາມສະພາບການ, ວິທີການແປ “ເພື່ອຕັດສິນ“ ສາມາດປະກອບມີ, “ຕັດສິນໃຈ“ ຫລື “ການກ່າວໂທດ“ ຫລື “ລົງໂທດ“ ຫລື “ດໍາລັດ.“
- ຄໍາວ່າ “ການຕັດສິນ“ ສາມາດແປເປັນ “ການລົງໂທດ“ ຫລື “ ການຕັດສິນໃຈ“ ຫລື “ຄໍາຕັດສິນ“ ຫລື “ດໍາລັດ“ ຫລື “ການກ່າວໂທດ.“
- ໃນບາງສະພາບການ, ປະໂຫຍກທີ່ວ່າ “ໃນການຕັດສິນ” ຍັງສາມາດແປໄດ້ “ໃນວັນຕັດສິນ“ ຫລື “ໃນຊ່ວງເວລາທີ່ພຣະເຈົ້າພິພາກສາປະຊາຊົນ.

## ພິພາກສາ, ຜູ້ພິພາກສາ ຫຼື ຜູ້ປົກຄອງ

### ນິຍາມ

ຜູ້ພິພາກສາຄືບຸກຄົນໜຶ່ງທີ່ຕັດສິນວ່າສິ່ງໃດຖືກຜິດ ເມື່ອມີການຂັດແຍ່ງກັນລະຫວ່າງຜູ້ຄົນ, ໂດຍປົກກະຕິເລື່ອງທີ່ກ່ຽວຂ້ອງກັບກົດໝາຍ.

- ໃນພຣະຄໍາພີ, ພຣະເຈົ້າຖືກກ່າວເຖິງວ່າເປັນຜູ້ພິພາກສາເພາະວ່າພຣະອົງເປັນຜູ້ພິພາກສາທີ່ສົມບູນແບບທີ່ພິພາກສາໃນເທື່ອສຸດທ້າຍກ່ຽວກັບສິ່ງທີ່ຖືກຫຼືຜິດ.
- ຫຼັງຈາກປະຊາຊົນອິດສະຣາເອນເຂົ້າໄປໃນແຜ່ນດິນການາອານແລະກ່ອນພວກເຂົາຈະມີກະສັດປົກຄອງພວກເຂົາ, ພຣະເຈົ້າໄດ້ແຕ່ງຕັ້ງຜູ້ນໍາທີ່ເອີ້ນວ່າ “ຜູ້ປົກຄອງ ຫຼື ຜູ້ພິພາກສາ“ ເພື່ອນໍາພວກເຂົາໃນເວລາທີ່ປະສົບກັບຫຍຸ້ງຍາກ. ປົກກະຕິແລ້ວຜູ້ພິພາກສາເຫຼົ່ານີ້ເປັນຜູ້ນໍາທາງທະຫານທີ່ໄດ້ຊ່ວຍຊີວິດຊາວອິດສະຣາເອນໂດຍການເອົາຊະນະພວກສັດຕູ.
- ຄໍາວ່າ “ຜູ້ພິພາກສາ“ ສາມາດເອີ້ນວ່າ “ຜູ້ຕັດສິນໃຈ“ ຫລື “ຜູ້ນໍາ“ ຫລື “ຜູ້ປົດປ່ອຍ“ ຫລື “ຜູ້ປົກຄອງ,“ ແລ້ວແຕ່ສະພາບການ.

## ພີ່ນ້ອງ,ຍາດພີ່ນ້ອງ

### ນິຍາມ

ຄໍາວ່າ "ພີ່ນ້ອງ" ເວົ້າເຖິງບຸກຄົນທີ່ມີຄວາມສໍາພັນທາງສາຍເລືອດ ຄໍາວ່າ "ຍາດພີ່ນ້ອງ" ເວົ້າເຖິງບຸກຄົນພິເສດກັບພີ່ນ້ອງທີ່ເປັນຜູ້ຊາຍ.

- ຄໍານີ້ສາມາດອ້າງເຖິງພີ່ນ້ອງສະຫນິດ ຢ່າງເຊັ່ນ ພໍ່ແມ່ ຫລື ອ້າຍນ້ອງ ຫລືພີ່ນ້ອງທີ່ຫ່າງອອກໄປ ເຊັ່ນ ປ້າ,ລຸງ ຫລື ລູກພີ່ລູກນ້ອງ.
- ໃນອິດສະຣາເອນຍຸກບູຮານ ຖ້າວ່າຜູ້ຊາຍຄົນຫນຶ່ງເສຍຊີວິດ ຍາດພີ່ນ້ອງຜູ້ຊາຍທີ່ໃກ້ຊິດທີ່ສຸດຂອງລາວ ຍ່ອມຖືກຄາດຫວັງໃຫ້ແຕ່ງງານກັບເມຍທີ່ເປັນຫມ້າຍຂອງລາວ ໃຫ້ເບິ່ງແຍງຊັບສົມບັດແລະຊ່ວຍສືບທອດນາມສະກຸນຂອງລາວ ຍາດພີ່ນ້ອງ-ຜູ້ໄຖ່.
- ຄໍານີ້ສາມາດແປໄດ້ວ່າ "ຍາດພີ່ນ້ອງ" ຫລື "ສະມາຊິກຄອບຄົວ".

## ພູມໃຈ,ຍິ່ງຜະຫຍອງ,ຄວາມຈອງຫອງ

### ນິຍາມ

ຄໍາວ່າ "ຍິ່ງ" ແລະ "ຄວາມຈອງຫອງ" ອ້າງເຖິງຄົນທີ່ຄິດເຖິງຕົນເອງສູງຫລາຍ ແລະສະເພາະຢ່າງຍິ່ງການຄິດວ່າເຂົາດີກວ່າຄົນອື່ນ

- ຄົນຍິ່ງຜະຫຍອງມັກບໍ່ຍອມຮັບຄວາມຜິດພາດຂອງຕົນເອງ ເຂົາບໍ່ຍອມຖ່ອມຕົວເລີຍ
- ຄວາມຍິ່ງນໍາໄປສູ່ການບໍ່ເຊື່ອຟັງພະເຈົ້າໃນຮູບແບບອື່ນໆ
- ຄໍາວ່າ"ຍິ່ງ"ແລະ"ຄວາມຍິ່ງ" ສາມາດໃຊ້ໃນແງ່ບວກໄດ້ ເຊັ່ນການ "ພູມໃຈກັບ" ສິ່ງທີ່ໃຜບາງຄົນປະສົບຄວາມສໍາເຣັດແລະການ "ພູມໃຈກັບ" ລູກໆ ຂອງທ່ານ ຄໍາກ່າວທີ່ວ່າ "ພູມໃຈໃນງານຂອງທ່ານ" ໝາຍເຖິງການພົບຄວາມສຸກເພາະເຮັດວຽກຂອງທ່ານອອກມາດີ


generated on Thu Jul 10 08:45:04 2025

- ບາງຄົນສາມາດພູມໃຈກັບສິ່ງທີ່ທ່ານໄດ້ກະທຳໂດຍບໍ່ຈອງຫອງໃນເລື່ອງນັ້ນເລຍ
  ບາງພາສາມີຄຳທີ່ແຕກຕ່າງກັນສຳລັບຄຳທັງສອງສຳລັບຄວາມຫມາຍທີ່ແຕກຕ່າງກັນຂອງຄຳນີ້ວ່າ "ຄວາມຍິ່ງ"
- ຄຳວ່າ"ຄວາມຈອງຫອງ" ມັກເປັນແງ່ລົບສະເໝີ ດ້ວຍຄວາມຫມາຍທີ່ວ່າ"ຈອງຫອງ"ຫລື"ອວດດີ" ຫລື "ທະນົງຕົວ"

## ພູເຂົາເຮີໂມນ

### ຂໍ້ເທັດຈິງ

ພູເຂົາເຮີໂມນ ແມ່ນຊື່ຂອງພູເຂົາທີ່ສູງທີ່ສຸດໃນອິດສະຣາເອນທີ່ຢູ່ຈຸດໃຕ້ສຸດຂອງສາຍພູເລບານອນ.

- ມັນຕັ້ງຢູ່ທາງເໜືອຂອງທະເລຄາລິເລ, ຢູ່ຊາຍແດນພາກເໜືອ ລະຫວ່າງອິດສະຣາເອນແລະຊີເຣຍ.
- ຊື່ອື່ນໆທີ່ໃຊ້ເອີ້ນ ພູເຂົາເຮີໂມນ ໂດຍກຸ່ມຄົນອື່ນແມ່ນ "ພູເຂົາສີຣີໂອນ" ແລະ "ພູເຂົາເສນີ."
- ພູເຂົາເຮີໂມນ ມີຍອດພູໃຫຍ່ສາມຈຸດສູງສຸດ. ຍອດສູງສຸດແມ່ນສູງປະມານ 2,800 ແມັດ.

## ພູເຂົາໝາກກອກເທດ

### ຂໍ້ເທັດຈິງ

ພູເຂົາຫມາກກອກເທດແມ່ນພູເຂົາຫລືເນີນພູໃຫຍ່ຕັ້ງຢູ່ທາງທິດຕາເວັນອອກຂອງເມືອງເຢຣູຊາເລັມ. ມັນສູງປະມານ 787 ແມັດ.

- ໃນພຣະຄັມພີເດີມ, ບາງຄັ້ງພູນີ້ຖືກເອີ້ນວ່າ "ພູເຂົາທີ່ຢູ່ທາງຕາເວັນອອກຂອງເຢຣູຊາເລັມ."
- ໃນພຣະຄັມພີໃໝ່ ໄດ້ບັນທຶກໄວ້ຫລາຍເຫດການວ່າ
  ໃນເວລາທີ່ພຣະເຢຊູແລະສາວົກຂອງພຣະອົງໄປທີ່ພູເຂົາຫມາກກອກເທດເພື່ອອະທິຖານແລະພັກຜ່ອນ.
- ພຣະເຢຊູຖືກຈັບໃນສວນເຄດເຊມາເນເຊິ່ງຕັ້ງຢູ່ເທິງພູເຂົາຫມາກກອກເທດ.
- ນີ້ຍັງສາມາດຖືກແປໄດ້ວ່າ "ເນີນພູໝາກກອກເທດ" ຫຼື "ພູເຂົາຕົ້ນໝາກກອກເທດ."

## ພົນລະເມືອງ

### ນິຍາມ

ພົນລະເມືອງ ຄືຄົນທີ່ອາໄສຢູ່ໃນເມືອງ, ປະເທດ, ຫຼື ອານາຈັກຫນຶ່ງ. ໂດຍສະເພາະ
ຄຳນີ້ກ່າວເຖິງບາງຄົນທີ່ໄດ້ຮັບການຍອມຮັບຢ່າງເປັນທາງການວ່າເປັນຜູ້ທີ່ອາໄສໃນທີ່ແຫ່ງນັ້ນຢ່າງຖືກຕ້ອງຕາມກົດໝາຍ.

- ການແປຄຳນີ້ຂຶ້ນຢູ່ກັບກໍລະນີ, ຊຶ່ງສາມາດແປວ່າ "ປະຊາຊົນ" ຫຼື "ຜູ້ທີ່ຕັ້ງຖິ່ນຖານ." ໄດ້ດ້ວຍ
- ພົນລະເມືອງສາມາດອາໄສຢູ່ໃນເຂດແດນທີ່ເປັນສ່ວນໜຶ່ງຂອງອານາຈັກ ຫຼື ອານາຈັກທີ່ມີກະສັດ, ຈັກກະພັດ, ຫຼື ຜູ້ຄອບຄອງຄົນອື່ນໆຄອບຄອງຢູ່. ຕົວຢ່າງເຊັ່ນ, ໂປໂລເປັນ

ພົນລະເມືອງຂອງຈັກກະພັດໂຣມັນ, ທີ່ປະກອບດ້ວຍແຄ້ວນຕ່າງໆ; ໂປໂລອາໄສຢູ່ໃນແຄ້ວນໜຶ່ງໃນບັນດາແຄ້ວນເຫລົ່ານັ້ນ.

- ໃນແງ່ຂອງຄຳປຽບທຽບ, ຜູ້ທີ່ເຊື່ອໃນພຣະເຢຊູຖືວ່າ "ເປັ

ພົນລະເມືອງ" ຂອງສະຫວັນ ໃນຄວາມຮູ້ສຶກທີ່ວ່າ ພວກເຂົາຈະໄດ້ຢູ່ທີ່ນັ້ນໃນວັນໜຶ່ງ. ເຊັ່ນດຽວກັບພົນລະເມືອງຂອງປະເທດ,
ຄຣິສຕຽນກໍເປັນຄົນຂອງອານາຈັກຂອງພຣະເຈົ້າ.

## ພົມມະຈາລີ

### ນິຍາມ

ຍິງພົມມະຈາລີເປັນຍິງສາວທີ່ບໍ່ມີຄວາມສຳພັນທາງເພດ

- ຜູ້ປະກາດພຣະທຳເອຊາຢາກ່າວວ່າ ພຣະເມຊີອາຈະບັງເກີດຈາກຍິງພົມມະຈາລີ.
- ມາຣີ ເປັນຍິງພົມມະຈາລີເມື່ອນາງຖືພາພຣະເຢຊູ. ພຣະອົງບໍ່ໄດ້ມີພໍ່ເປັນມະນຸດ.
- ໃນບາງພາສາມີຄຳສັບທີ່ເປັນຄຳສັບສຸພາບທີ່ຍ້ອງເຖິງພົມມະຈາລີ


generated on Thu Jul 10 08:45:04 2025

## ຝາດ, ການຝາດ

### ນິຍາມ

ຄຳວ່າ "ຝາດ" ແລະ "ການຝາດ" ໝາຍເຖິງສ່ວນໜຶ່ງຂອງຂະບວນການແຍກເມັດເຂົ້າສາລີອອກຈາກສ່ວນທີ່ເຫລືອຂອງພືດເຂົ້າສາລີ.

- ການຝາດເຂົ້າສາລີຈະເຮັດໃຫ້ເມັດພືດຫລຸດອອກຈາກເຝືອງແລະຂີ້ເຫຍື້ອ. ຫລັງຈາກນັ້ນເມັດແມ່ນ "ຮ່ອນ" ເພື່ອແຍກເມັດອອກຈາກວັດຖຸທີ່ບໍ່ຕ້ອງການທັງໝົດ, ໂດຍປະໄວ້ພຽງແຕ່ສ່ວນເມັດທີ່ສາມາດກິນໄດ້.
- ໃນສະໄໝພຣະຄຳພີ "ລານຝາດເຂົ້າ" ເປັນພື້ນທີ່ທີ່ເປັນຫີນລາບໃຫຍ່ຫຼືຫຍ້າດ້ວຍຂີ້ຕົມເພື່ອໃຫ້ພື້ນແຂງເພື່ອຝາດເມັດເຂົ້າໃຫ້ຫລຸດຈາກຕົ້ນເຂົ້າ.
- ບາງຄັ້ງ“ ກອງນວດເຂົ້າ” ຫລື“ ລ້ຝາດເຂົ້າ” ແມ່ນບາງຄັ້ງໃຊ້ເພື່ອຫໍາລາຍເມັດພືດແລະຊ່ວຍແຍກມັນອອກຈາກເຝືອງແລະ ຂີ້ແກບ.
- "ລ້ເລື່ອນຝາດເຂົ້າ" ຫຼື "ກະດານຝາດເຂົ້າ"ໃຊ້ເພື່ອແຍກເມັດເຂົ້າອອກ. ເຄື່ອງນີ້ເຮັດຈາກໄມ້ກະດານທີ່ມີເຫລັກແຫລມທີ່ປາຍ.

## ຝາຣີຊາຍ

### ນິຍາມ

ຝາຣີຊາຍຄືກຸ່ມຜູ້ນໍາສາສະໜາຊາວຢິວຊຶ່ງມີຄວາມສໍາຄັນແລະມີອໍານາດຫລາຍໃນສະໄໝຂອງພຣະເຢຊູ

- ຝາຣີຊາຍຫຼາຍຄົນເປັນນັກທຸລະກິດຈາກຊົນຊັ້ນກາງແລະບາງຄົນເປັນປະໂລຫິດດ້ວຍ
- ໃນບັນດາຜູ້ນໍາສາສະໜາຊາວຢິວທັງໝົດ ຝາຣີຊາຍເປັນກຸ່ມທີ່ເຂັ້ມງວດຫລາຍທີ່ສຸດໃນການປະຕິບັດບັນຍັດຂອງໂມເຊທັງໝົດຕະລອດເຖິງຫໍານຽມອື່ນໆ ຂອງຊາວຢິວ
- ພວກເຂົາກັ້ງວົນທີ່ຊາວຢິວແຍກອອກມາຈາກອິດທິພົນຂອງຊາວຕ່າງຊາດ, ຄໍາວ່າ "ຝາຣີຊາຍ" ມາຈາກຄໍາວ່າ "ແຍກອອກມາ"
- ພວກຝາຣີຊາຍເຊື່ອໃນຊີວິດຫຼັງຄວາມຕາຍ ພວກຫ່ານຢັ້ງເຊື່ອໃນບັນດາທູດສະຫວັນແລະວິນຍານຕ່າງໆ ວ່າມີຢູ່ຈິງອີກດ້ວຍ
- ຝາຣີຊາຍແລະພວກຊະດູກາຍ ເປັນຜູ້ຕໍ່ຕ້ານພຣະເຢຊູ ໃນສະໄໝເລີ່ມຕົ້ນຄຣິດສະຕຽນຢ່າງເຂັ້ມງວດ

## ຝາຣາໂອ , ເຈົ້າຊີວິດເອຢິບ

### ຂໍ້ເທັດຈິງ

ໃນສະໄໝບູຮານ ກະສັດຊຶ່ງປົກຄອງປະເທດເອຢິບນັ້ນເອີ້ນວ່າຝາຣາໂອ

- ສລຸບເວລາທັງໝົດ ມີຝາຣາໂອຫລາຍກວ່າ 300 ອົງໄດ້ປົກຄອງປະເທດເອຢິບເປັນເວລາຄົນກວ່າ 2,000 ປີ
- ກະສັດປະເທດເອຢິບທຸກອົງມີອໍານາດແລະຮັ່ງມີ
- ໃນພຣະຄຳພີໄດ້ກ່າວເຖິງກະສັດເອຢິບຫລາຍພຣະອົງ
- ຫລາຍເທື່ອຕໍາແໜ່ງນີ້ໃຊ້ແທນພຣະນາມຫລາຍກວ່າຕໍາແໜ່ງ ໃນຫຼາຍກໍລະນີນັ້ນຄໍາວ່າ ຝາຣາໂອ ໃນພາສາອັງກິດຈະຂຶ້ນຕົ້ນດ້ວຍອັກສອນໂຕໃຫຍ່

## ຟີລິດສະຕິນ

### ຂໍ້ເທັດຈິງ

ຟີລິດສະຕິນຄືຊື່ຂອງແຄວ້ນໃຫຍ່ໃນແຜ່ນດິນການາອານ ຊຶ່ງຕັ້ງຢູ່ຕິດກັບຊາຍຝັ່ງຂອງທະເລເມລິເຕເລເນ

- ແຄວ້ນຟີລິດສະຕິນຕັ້ງຢູ່ເທິງທົ່ງພຽງ ຊາຍຝັ່ງຈາກເມືອງຢັບຟາໃນທິດເໜືອໄປຈົນເຖິງເມືອງກາຊາທາງຕອນໃຕ້ ໄລຍະທາງປະມານ 64 ກິໂລແມດແລະຄວາມກວ້າງປະມານ 16 ກິໂລແມດ
- ຟີລິດສະຕິນຖືກຄອບຄອງໂດຍ "ຊາວຟີລິດສະຕິນ" ທີ່ແມ່ນກຸ່ມຊົນຊາດທີ່ມີອໍານາດແລະເປັນສັດຕູຊ້ໍາແລ້ວຊ້ໍາອີກກັບຊາວອິດສະລາເອນ


generated on Thu Jul 10 08:45:04 2025

## ຟີລິບ , ການປະກາດຂ່າວປະເສີດ

### ຂໍ້ເທັດຈິງ

ຄຣິດຕະຈັກໃນສະໄໝເລີ່ມຕົ້ນໃນກຸງເຢລູຊາເລັ້ມ ຟີລິບແມ່ນໜຶ່ງ
ໃນຜູ້ນຳທັ້ງເຈັດຄົນທີ່ໄດ້ຮັບການຊົ່ງເລືອກໃຫ້ເບິ່ງແຍງຄົນຍາກຈົນແລະຄຣິດສະຕຽນທີ່ຂາດເຂີນ ສະເພາະໃນບັນດາແມ່ໝ້າຍ

- ພຣະເຈົ້າຊົ່ງໃຊ້ຟີລິບໃນການແບ່ງປັນຂ່າວປະເສີດໃຫ້ກັບຜູ້ຄົນທີ່ອາໄສຢູ່ໃນເມືອງຕ່າງໆ ໃນແຄວ້ນຢູດາແລະຄາລິເລ
  ທັ້ງໝົດໄປເຖິງຊາຍຊາວເອທິໂອເປຍທີ່ຟີລິບໄດ້ພົບໃນທາງ ທະເລຊາຍລະຫວ່າງທາງຈາກກຸງເຢລູຊາເລັ້ມເຖິງເມືອງກາຊາ
- ຫຼາຍປີຕໍ່ມາ ຟີລິບໄດ້ໄປຢູ່ໃນເມືອງຊາຣີເຣຍ
  ທີ່ໂປໂລແລະສະຫາຍຂອງທ່ານໄດ້ເຂົ້າໄປພັກຢູ່ທີ່ບ້ານຂອງລາວລະຫວ່າງເດີນທາງຂອງພວກທ່ານກັບໄປຢັ້ງກຸງເຢລູຊາເລັ້ມ
- ຜູ້ຊ່ຽວຊານທາງດ້ານພຣະຄຳພີສ່ວນໃຫຍ່ຄິດວ່າຜູ້ປະກາດຟີລິບບໍ່ແມ່ນຊາຍຄົນດຽວກັບສາວົກຂອງພຣະເຢຊູທີ່ຊື່ຟີລິບ
  ບາງພາສາຈະສະກົດຊື່ຂອງຊາຍທັ້ງສອງຄົນນີ້ຕ່າງກັນນ້ອຍນຶ່ງເພື່ອຊີ້ໃຫ້ເຫັນຊັດເຈນວ່າເປັນຄົນລະຄົນ

## ຟີລິບ , ອັກຄະສາວົກ

### ຂໍ້ເທັດຈິງ

ຟີລິບແມ່ນສາວົກລຸ້ນແລກໃນຈຳນວນສິບສອງຄົນຂອງພຣະເຢຊູ ທ່ານມາຈາກເມືອງເບັດໄຊດາ

- ຟີລິບໄດ້ນຳນາທານາເອນມາພົບກັບພຣະເຢຊູ
- ພຣະເຢຊູໄດ້ຖາມຟີລິບກ່ຽວກັບການຈັດຫາອາຫານມາລ້ຽງຄົນຫ້າພັນຄົນໄດ້ຢ່າງໃດ
- ໃນອາຫານຄ່ຳສຸດທ້າຍທີ່ພຣະເຢຊູໄດ້ຮັບປະທານອາຫານກັບບັນດາສາວົກຂອງພຣະອົງ ພຣະອົງໄດ້ຊົ່ງກ່າວກັບພວກສາ
  ວົກເລື່ອງພຣະເຈົ້າ ພຣະບິດາຂອງພຣະອົງ ຟີລິບໄດ້ຂໍໃຫ້ພຣະເຢຊູສະແດງໃຫ້ພວກທ່ານເຫັນພຣະບິດາ
- ບາງພາສາ ມັກ ສະກົດຊື່ຟີລິບຄົນນີ້ແຕກຕ່າງຈາກຟີລິບ (ຜູ້ປະກາດ) ເພື່ອຫຼີກລ້ຽງບໍ່ໃຫ້ສັບສົນ

## ຟີລິປອຍ

### ຂໍ້ເທັດຈິງ

ຟີລິປອຍເປັນເມືອງໃຫຍ່ແລະເປັນເມືອງອານານິຄົມຂອງອານາຈັກໂຣມທີ່ຕັ້ງຢູ່ໃນແຄວ້ນມາຊີໂດເນຍພາກເໜືອຂອງກຣີກ ບູຮານ

- ໂປໂລແລະສີລາໄດ້ເດີນທາງໄປເມືອງຟີລິປອຍເພື່ອເທສນາເຣື່ອງພຣະເຢຊູ
- ໂປໂລແລະສີລາຖືກຈັບກຸມຂະນະທີ່ຢູ່ໃນເມືອງຟີລິປອຍນັ້ນ ແຕ່ພຣະເຈົ້າໄດ້ປົດປ່ອຍພວກທ່ານໃຫ້ເປັນອິດສະຫລະຢ່າງໜ້າອັດສະຈັນ
- ໃນພັນທະສັນຍາໃໝ່ພຣະທຳຟີລິປອຍເປັນຈົດໝາຍທີ່ອັກຄະສາວົກໂປໂລໄດ້ຂຽນເຖິງບັນດາຄຣິດສະຕຽນທີ່ຄຣິດຕະຈັກໃນເມືອງຟີລິປອຍ
- ໝາຍເຫດ ນີ້ແມ່ນຄົນລະເມືອງກັບເມືອງຟີລິປອຍໃນແຄວ້ນຊີຊາເຣຍ ທີ່ຕັ້ງຢູ່ທພາກເໜືອຂອງອິດສະລາເອນໃກ້ພູເຂົາເຮີໂມນ

## ຟີນີເຊຍ

### ຂໍ້ເທັດຈິງ

ໃນສະໄໝບູຮານ
ຟີນີເຊຍເປັນຊາດທີ່ມີຄວາມຮຸ່ງເຮືອງໃນການາອານຕິດກັບຊາຍຝັ່ງຂອງທະເລເມດິເຕລານເນທາງຕອນເໜືອຂອງອິດສະລາເອນ.

- ຟີນີເຊຍໄດ້ຄອບຄອງດິນແດນບໍລິເວນທາງທິດຕະເວັນຕົກຊຶ່ງເປັນປະເທດເລບນອນໃນປະຈຸບັນ.
- ໃນສະໄໝຂອງພັນທະສັນຍາໃໝ່, ເມືອງຫຼວງຂອງປະເທດຟີນີເຊຍມີຊື່ວ່າເມືອງໄທລະ.
  ແລະເມືອງທີ່ມີຄວາມສຳຄັນອີກເມືອງໜຶ່ງຂອງຟີນີເຊຍຄືເມືອງໄຊດອນ.
- ຊາວຟີນີເຊຍມີຊື່ສຽງໃນເລື່ອງຂອງທັກສະງານໄມ້
  ພວກເຂົາໃຊ້ວັດຖຸດິບຄືໄມ້ສົນສີດາທີ່ເຕີບໃຫຍ່ຢ່າງອຸດົມສົມບູນໃນປະເທດ,ນຳມາໃຊ້ເປັນສີຍ້ອມສີມ່ວງເຊິ່ງມີລາຄາແພງ,
  ນອກຈາກນີ້ພວກທ່ານຍັງມີຄວາມສາມາດໃນເລື່ອງຂອງການຄ້າຂາຍທາງທະເລ,ແລະມີທັກສະຢ່າງຫລາຍໃນການຕໍ່ເຮືອອີກດ້ວຍ.
- ໜຶ່ງໃນຕົວອັກສອນຍຸກເລີ່ມຕົ້ນນັ້ນຖືກຄິດຄົ້ນຂຶ້ນໂດຍຊາວຟີນີເຊຍ.
  ຕົວອັກສອນຂອງຊາວຟີນີເຊຍຖືກໃຊ້ໄປຢ່າງຫລວງຫຼາຍເພາະພວກເຂົາຕິດຕໍ່ສື່ສານກັບຊົນຫຼາຍກຸ່ມຜ່ານການຄ້າຂາຍ.

## ຟີເນຫັດ

### ຂໍ້ເທັດຈິງ

ຟີເນຫັດເປັນຊື່ຂອງຜູ້ຊາຍສອງຄົນໃນພັນທະສັນຍາເດີມ

- ຜູ້ໜຶ່ງໃນຈໍານວນຫຼານຊາຍຂອງອາໂລນຄືປະໂລຫິດທີ່ມີຊື່ວ່າຟີເນຫັດ ລາວໄດ້ຕໍ່ຕ້ານພວກຂາບໄຫວ້ພະທຽມໃນອິດສະລາເອນ
- ຟີເນຫັດໄດ້ຊ່ວຍໃຫ້ຊາວອິດສະລາເອນພົ້ນຈາກໂລກລະບາດຊຶ່ງພຣະເຈົ້າຢາເວໄດ້ສົ່ງມາເພື່ອລົງໂທດຊາວອິດສະລາເອນທີ່ໄດ້ແຕ່ງງານກັບຜູ້ຍິງຊາວມີເດ
- ຫຼາຍເທື່ອຟີເນຫັດໄດ້ເດີນທາງຮ່ວມກັບກອງທັບອິດສະລາເອນເພື່ອທໍາລາຍຄົນມີເດຍ
- ໃນພັນທະສັນຍາເດີມໄດ້ກ່າວເຖິງຜູ້ຊາຍທີ່ຊື່ວ່າຟີເນຫັດອີກຄົນໜຶ່ງຊຶ່ງເປັນໜຶ່ງໃນບຸດຊາຍທີ່ຊົ່ວຮ້າຍຂອງປະໂລຫິດເອລີໃນສະໄໝຂອງຜູ້ປະກາດພະທໍາ
- ຟີເນຫັດແລະພີ່ນ້ອງຊາຍຂອງທ່ານທີ່ຊື່ວ່າໂລນີຖືກຂ້າຕາຍເມື່ອຊາວຟີລິດສະຕິນເຂົ້າຈູ່ໂຈມຕີອິດສະລາເອນແລະໄດ້ລັກຫີບພັນທະສັນຍາໄປ

## ຟື້ນຄືນຊີວິດ

### ນິຍາມ

ຄໍາວ່າ“ ຟື້ນຄືນຊີວິດ” ໝາຍເຖິງການກະທໍາທີ່ຈະມີຊີວິດອີກຄັ້ງ ໜຶ່ງຫຼັງຈາກທີ່ຕາຍໄປ.

- ການປຸກຄົນອື່ນໃຫ້ມີຊີວິດໝາຍເຖິງການເຮັດໃຫ້ຄົນນັ້ນກັບຄືນມາມີຊີວິດອີກຄັ້ງ. ມີແຕ່ພຣະເຈົ້າເທົ່ານັ້ນທີ່ມີອໍານາດເຮັດສິ່ງນີ.
- ຄໍາວ່າ“ ການຄືນມາຈາກຕາຍ” ມັກຈະໝາຍເຖິງການກັບຄືນມາຂອງພຣະເຢຊູຫຼັງຈາກທີ່ລາວຕາຍ.
- ເມື່ອພຣະເຢຊູກ່າວວ່າ“ ເຮົາເປັນການຄືນມາຈາກຕາຍແລະເປັນຊີວິດ”
  ພຣະອົງໝາຍຄວາມວ່າພຣະອົງເປັນຜູ້ທີ່ມາຈາກການກັບຄືນມາຈາກຕາຍແລະເປັນຜູ້ທີ່ເຮັດໃຫ້ຜູ້ຄົນກັບຄືນມາມີຊີວິດອີກ.

### ຄໍາແນະນໍາໃນການແປ

- ຄໍາວ່າ "ການຟື້ນຄືນຊີວິດ" ຍັງສາມາດແປເປັນ "ການກັບຄືນສູ່ຊີວິດ" ຫລື "ການມີຊີວິດອີກຄັ້ງຫລັງຈາກທີ່ຕາຍແລ້ວ."
- ຄວາມໝາຍທີ່ແທ້ຈິງຂອງຄໍານີ້ແມ່ນ“ ການລຸກຂຶ້ນ” ຫລື“ ການກະທໍາທີ່ຖືກຍົກຂຶ້ນມາ

## ຟື້ນຟູ, ການຟື້ນຟູ

### ນິຍາມ

ຂໍ້ກໍານົດ“ ການຟື້ນຟູ” ແລະ“ ການຟື້ນຟູ” ໝາຍເຖິງການເຮັດໃຫ້ບາງສິ່ງບາງຢ່າງກັບສູ່ສະພາບເດີມແລະມີສະພາບດີຂຶ້ນ.

- ເມື່ອພາກສ່ວນຂອງຮ່າງກາຍທີ່ມີພະຍາດໄດ້ຮັບການຟື້ນຟູ, ນີ ໝາຍ ຄວາມວ່າມັນໄດ້“ ຫາຍດີແລ້ວ”.
- ສາຍພົວພັນທີ່ແຕກຫັກທີ່ຖືກຟື້ນຟູ, ໄດ້ "ໄດ້ຮັບການຄືນດີກັນ." ພຣະເຈົ້າຊົ່ງຟື້ນຟູຄົນທີ່ເຮັດບາບແລະ ນໍາ ພວກເຂົາຄືນມາສູ່ຕົວເອງ.
- ຖ້າປະຊາຊົນໄດ້ຮັບການຟື້ນຟູຄືນສູ່ປະເທດທີ່ຢູ່ອາໃສຂອງພວກເຂົາມັນຫມາຍຄວາມວ່າພວກເຂົາໄດ້ຖືກ "ນໍາກັບຄືນ" ຫຼື "ກັບຄືນ" ກັບປະເທດນັ້ນ.

### ຄໍາແນະນໍາໃນການແປ

- ອີງຕາມສະພາບການ, ວິທີການແປ "ການຟື້ນຟູ" ອາດປະກອບມີ: "ຕໍ ໃໝ່" ຫລື "ຈ່າຍຄືນ" ຫລື "ກັບຄືນ" ຫລື "ຮັກສາ" ຫລື"ນໍາ ກັບຄືນມາ."
- ຄໍາເວົ້າສໍາລັ ຄໍານີ້ອາດແມ່ນ "ສ້ໍາໃໝ່" ຫລື "ສ້ໍາໃໝ່ໃຫ້ ໃໝ່."
- ອີງຕາມສະພາບການ, "ການຟື້ນຟູ," ສາມາດແປເປັນ "ການຕໍ່ອາຍຸ" ຫລື "ການຮັກສາ" ຫລື "ການປອງດອງ."

## ມອບ, ຮັບມອບ, ການມອບໝາຍ.

### ນິຍາມ

ຄໍາວ່າ "ມອບ" ແລະ "ການມອບໝາຍ" ກ່າວເຖິງການຕັດສິນໃຈ ຫຼືສັນຍາທີ່ຈະເຮັດບາງສິ່ງ.

- ຄົນທີ່ສັນຍາທີ່ຈະເຮັດບາງສິ່ງ ຍັງອະທິບາຍໄດ້ວ່າເປັນການ "ຮັບມອບໝາຍ" ທີ່ຈະເຮັດສິ່ງນັ້ນ.
- ຄໍາວ່າ "ມອບ" ງ່ານບາງຢ່າງໃຫ້ກັບຄົນບາງຄົນ ໝາຍເຖິງການມອບໝາຍງ່ານແກ່ຄົນນັ້ນ. ຕົວຢ່າງເຊັ່ນ, ໃນ 2 ໂກຣິນໂທ ໂປໂລບອກວ່າພຣະເຈົ້າໄດ້ຊົ່ງ "ມອບ" (ຫຼື "ປະທານ") ພັນທະກິດໃຫ້ແກ່ເຮົາໃນການຊ່ວຍຜູ້ຄົນໃຫ້ຄືນດີກັບພຣະເຈົ້າ.


generated on Thu Jul 10 08:45:04 2025

- ຄຳວ່າ "ມອບ" ແລະ "ຮັບມອບ" ມັກຈະໝາຍເຖິງການເຮັດຜິດບາງຢ່າງດ້ວຍ ຢ່າງເຊັ່ນ "ການທຳບາບ" ຫຼື "ການລ່ວງປະເວນີ" ຫຼື "ການເປັນຄາດຕະກອນ."
- ການອະທິບາຍ "ມອບໝາຍງານໃຫ້ກັບເຂົາ" ສາມາດແປໄດ້ວ່າ "ໃຫ້ງານນັ້ນແກ່ເຂົາ" ຫຼື "ມອບໝາຍງານນັ້ນໃຫ້ກັບເຂົາ."
- ຄຳວ່າ "ການມອບໝາຍ" ສາມາດແປໄດ້ວ່າ "ງານທີ່ມອບໃຫ້

ຫຼື " ສັນຍາທີ່ໄດ້ທຳໄວ້.

## ມອບໝາຍ, ຈັດໃຫ້, ໄດ້ກຳໜົດໃຫ້

### ນິຍາມ

ຄຳວ່າ " ມອບໝາຍ " ຫລື " ໄດ້ກຳນົດໃຫ້ " ເວົ້າເຖິງການແຕ່ງຕັ້ງບາງຄົນໃຫ້ເຮັດວຽກພິເສດບາງຢ່າງ.

- ຜູ້ເຜີຍພຣະວັດຈະນະ ຊາມູເອນໄດ້ບອກໃຫ້ກະສັດຊາອູນໄວ້ລ່ວງໜ້າວ່າໃຫ້.
- "ກຳນົດ " ຊາຍສະກັນທີ່ດີທີ່ສຸດຂອງອິສະຣາເອນໃຫ້ຮັບໃຊ້ໃນກອງທັບ.
- ໂມເຊ " ກຳໜົດໃຫ້ "
  ແຕ່ລະຝ່າຍໃນສິບສອງເຜົ່າຂອງອິສະຣາເອນໄດ້ຮັບສ່ວນແບ່ງທີ່ດິນໃນແຜ່ນດິນການາອານເພື່ອພວກເຂົາຈະໄດ້ອາໃສຢູ່.
- ພາຍໃຕ້ພຣະບັນຍັດຂອງພັນທະສັນຍາເດີມ ບາງເຜົ່າຂອງອິສະຣາເອນໄດ້ຖືກກຳນົດໄວ້ຮັບໃຊ້ໃນຖານະປະໂລຫິດ
  ຜູ້ຊ່ຽວຊານທາງດ້ານສິລະປະ ນັກຮ້ອງ ແລຊ່າງກໍ່ສ້າງ.
- ຄຳວ່າ " ມອບໝາຍ " ອາດຈະແປໄດ້ອີກວ່າ " ໃຫ້ " ຫລື " ແຕ່ງຕັ້ງ " ຫລື " ຖືກເລືອກໃຫ້ເຮັດໜ້າທີ່ຂອງ "
  ທັງນີ້ຂຶ້ນຢູ່ກັບກໍລະນີນັ້ນໆ.
- ຄຳວ່າ " ໄດ້ມອບໝາຍ "ອາດຈະແປໄດ້ອີກວ່າ " ໄດ້ແຕ່ງຕັ້ງ " ຫລື " ໄດ້ມອບໝາຍໜ້າທີ່ໃຫ້. "

## ມະຫາປະໂຣຫິດ

### ນິຍາມ

ຄຳວ່າ
"ມະຫາປະໂຣຫິດ"ອ້າງເຖິງປະໂຣຫິດພິເສດທີ່ໄດ້ຮັບການແຕ່ງຕັ້ງໃຫ້ຮັບໃຊ້ເປັນເວລາໜຶ່ງປີໃນຖານະຜູ້ນຳຂອງປະໂຣຫິດທັງໝົດຂອງອິດສະຣາເອນ.

- ມະຫາປະໂຣຫິດມີໜ້າທີ່ຮັບຜິດຊອບພິເສດ.
  ທ່ານເປັນພຽງຄົນດຽວທີ່ໄດ້ຮັບອະນຸຍາດໃຫ້ເຂົ້າໄປໃນສ່ວນບໍລິສຸດທີ່ສຸດຂອງວິຫານເພື່ອຈະຖວາຍເຄື່ອງບູຊາພິເສດປີລະເທື່ອ.
- ອິດສະຣາເອນໄດ້ມີປະໂຣຫິດຫລາຍຄົນ, ແຕ່ມີມະຫາປະໂຣຫິດພຽງຄົນດຽວໃນຊ່ວງເວລາໜຶ່ງ.
- ເມື່ອພຣະເຢຊູຊົງຖືກຈັບ, ກາຍາຟາເປັນມະຫາປະໂລຫິດຢ່າງເປັນທາງການ. ພໍ່ເຖົ້າຂອງກາຍາຟາ
  ອັນນາດຖືກກ່າວເຖິງໃນບາງຄັ້ງເພາະເຂົາເຄີຍເປັນມະຫາປະໂຣຫິດທີ່ຍັງມີອຳນາດ ແລະອຳນາດສິດທິຂາດເໝືອຜູ້ຄົນ.

### ຄຳແນະນຳໃນການແປ

- "ມະຫາປະໂຣຫິດ" ສາມາດແປໄດ້ວ່າ "ປະໂຣຫິດສູງສຸດ" ຫລື "ປະໂຣຫິດທີ່ມີຕຳແໜ່ງສູງສຸດ."
- ໃຫ້ແນ່ໃຈວ່າຄຳນີ້ໃຊ້ຄຳແປຕ່າງຈາກຄຳວ່າ "ຫົວໜ້າປະໂຣຫິດ."

## ມະຫິດທິຣິດ

### ນິຍາມ

ຄຳວ່າ "ມະຫິດທິຣິດ" ແປຕາມຕົວອັກສອນໝາຍຄວາມວ່າ "ມີຣິດອຳນາດທັງໝົດ," ໃນພຣະຄັມພີແມ່ນເວົ້າເຖິງພຣະເຈົ້າ.

- ຄຳນຳໜ້າຊື່ "ຊົງມະຫິດທິຣິດ" ຫລື "ຜູ້ຊົງມະຫິດທິຣິດອົງດຽວ" ໝາຍເຖິງພຣະເຈົ້າ ແລະສະແດງໃຫ້ເຫັນວ່າພຣະອົງຊົງມີອຳນາດ
  ແລະສິດທິເໜືອທຸກສິ່ງຢ່າງສົມບູນ.
- ຄຳນີ້ໃຊ້ເພື່ອອະທິບາຍເຖິງພຣະເຈົ້າ ໂດຍເອີ້ນວ່າ "ພຣະເຈົ້າຜູ້ຊົງມະຫິດທິຣິດ" ຫລື "ພຣະເຈົ້າຜູ້ຊົງຣິດຫານຸພາບສູງສຸດ" ຫລື "ອົງພ
  ຣະຜູ້ເປັນເຈົ້າພຣະເຈົ້າຜູ້ຊົງຣິດຫານຸພາບສູງສຸດ" ຫລື "ອົງພຣະຜູ້ເປັນເຈົ້າ ຜູ້ຊົງຣິດຫານຸພາບສູງສຸດ."


generated on Thu Jul 10 08:45:04 2025

### ຄຳແນະນຳໃນການແປ

- ຄຳນີ້ສາມາດແປໄດ້ອີກວ່າ "ມີອຳນາດເໜືອທັງໝົດທັ້ງປວງ" ຫລື "ອົງດຽວທີ່ມີຣິດອຳນາດຢ່າງສົມບູນ" ຫລື "ພຣະເຈົ້າຜູ້ຊົງມີຣິດອຳນາດຢ່າງສົມບູນ."
- ວິທີແປເນື້ອຫານີ້ມີຫລາຍຢ່າງ "ອົງພຣະຜູ້ເປັນເຈົ້າ ພຣະເຈົ້າຜູ້ຊົງມີຣິດສູງສຸດ" ຊຶ່ງສາມາດລວມເຖິງ "ພຣະເຈົ້າຜູ້ຄອບຄອງ" ຫລື "ພຣະເຈົ້າຜູ້ຊົງມະຫິທິຣິດ ຜູ້ເປັນເຈົ້ານາຍເໜືອທຸກສິ່ງທຸກຢ່າງ."

## ມັດທາຍ, ເລວີ

### ຂ້ເທັດຈິງ

ມັດທາຍ ເປັນຄົນໜຶ່ງໃນຜູ້ຊາຍສິບສອງຄົນທີ່ພຣະເຢຊູໄດ້ເລືອກໃຫ້ເປັນອັກຄະສາວົກຂອງພຣະອົງ.ເຂົາເປັນທີ່ຮູ້ຈັກກັນໃນນາມຂອງເລວີ ບຸດຊາຍຂອງອັນເຟອາດ.

- ເລວີ(ມັດທາຍ) ເປັນຄົນເກັບພາສີຈາກເມືອງກາເປນາອູມກ່ອນທີ່ເຂົາຈະໄດ້ພົບພຣະເຢຊູ.
- ມັດທາຍ ໄດ້ຂຽນຂ່າວປະເສີດທີ່ໃຊ້ຊື່ຂອງເຂົາ.
- ມີຄົນຫຼາຍຄົນທີ່ມີຊື່ວ່າ ເລວີ ໃນພຣະຄັມພີ.

## ມາຊີໂດເນຍ

### ຂ້ເທັດຈິງ

ໃນສະໄໝພັນທະສັນທະສັນຍາໃໝ່, ມາຊີໂດເນຍເປັນແຄ້ວນໜຶ່ງຂອງໂຣມທີ່ຕັ້ງຢູ່ທາງຕອນເໜືອຂອງກະຣີກບູຮານ.

- ເມືອງທີ່ສຳຄັນຂອງມາຊີໂດເນຍ ບາງເມືອງທີ່ຖືກກ່າວເຖິງໃນພຣະຄັມພີຄື ເບເຣຍ,ຟີລິບປອຍແລະເທສະໂລນີກ.
- ຊ່ານທາງນິມິດ, ພຣະເຈົ້າໄດ້ສັ່ງໃຫ້ໂປໂລເທດສະໜາຂ່າວປະເສີດໃນແຄ້ວນມາຊີໂດເນຍ.
- ໂປໂລແລະເພື່ອນຮ່ວມງານຂອງເຂົາໄດ້ໄປແຄ້ວນມາຊີໂດເນຍແລະສອນປະຊາຊົນທີ່ນັ້ນກ່ຽວກັບພຣະເຢຊູແລະໄດ້ຊ່ວຍຜູ້ເຊື່ອໃໝ່ໃຫ້ເຕີບໃຫຍ່ຂຶ້ນໃນຄ
- ໃນພຣະຄັມພີ ມີຈົດໝາຍຫຼາຍສະບັບທີ່ໂປໂລໄດ້ຂຽນເຖິງຜູ້ເຊື່ອໃນເມືອງຟີລິບປອຍແລະເທສະໂລນີກຂອງແຄ້ວນມາຊີໂດເນຍ.

### ມາທາ

### ຂ້ເທັດຈິງ

ມາທາເປັນຜູ້ຍິງຄົນໜຶ່ງຈາກເບັດທານີທີ່ໄດ້ຕິດຕາມພຣະເຢຊູ.

- ມາທາ ມີນ້ອງສາວຊື່ ມາຣີ ແລະນ້ອງຊາຍຊື່ ລາຊະໂຣ,ຜູ້ທີ່ຕິດຕາມພຣະເຢຊູດ້ວຍເຊັ່ນກັນ.
- ຄັ້ງໜຶ່ງເມື່ອພຣະເຢຊູໄດ້ມາຢ້ຽມພວກເຂົາທີ່ບ້ານ,ມາທາ ໄດ້ຖືກກວນໃຈໃນການຈັດຕຽມອາຫານ ຂະນະທີ ມາຣີ ນ້ອງສາວຂອງນາງໄດ້ນັ່ງແລະຟັງພຣະເຢຊູສັ່ງສອນ.
- ເມື່ອ ລາຊະໂຣ ໄດ້ຕາຍ, ມາທາ ໄດ້ທູນພຣະເຢຊູວ່າ ນາງໄດ້ເຊື່ອວ່າພຣະເຢຊູເປັນພຣະຄຣິດພຣະບຸດຂອງພຣະເຈົ້າ.

### ມານາ

### ນິຍາມ

ມານາ ເປັນອາຫານແຜ່ນບາງ
ເໝືອນກັບເຂົ້າໜົມປັ່ງທີ່ພຣະເຈົ້າໄດ້ຊົງຈັດຕຽມໃຫ້ກັບຊາວອິດສະຣາເອນໄດ້ກິນລະຫວ່າງທີ່ຢູ່ໃນຖິ່ນແຫ້ງແລ້ງກັນດານຫຼັງຈາກທີ່ພວກເຂົາໄດ້ອອກຈາກອີຢິບ.

- ມານາ ເບິ່ງເໝືອນເກັດສີຂາວທີ່ປາກົດໃນຕອນເຊົ້າຂອງແຕ່ລະວັນເທິງພື້ນດິນ. ພາຍໃຫ້ນ້ຳຄ້າງ ມີລົດຊາດຫວານ,ເໝືອນນ້ຳເຜິ້ງ.
- ພວກອິດສະຣາເອນໄດ້ເກັບລວບລວມ ມານາ ທຸກວັນຍົກເວັ້ນວັນສະບາໂຕ.
- ໃນວັນກ່ອນວັນສະບາໂຕ,
ພຣະເຈົ້າຊົງບອກໃຫ້ພວກອິດສະຣາເອນເກັບມາເພີ່ມເປັນສອງເທົ່າເພື່ອພວກເຂົາຈະບໍ່ຕ້ອງເກັບໃນວັນພັກຜ່ອນຂອງພວກເຂົາ.
- ໃນພຣະຄັມພີ, "ມານາ"ໄດ້ຖືກອ້າງເຖິງວ່າເປັນ "ເຂົ້າໜົມປັ່ງຈາກສະຫວັນ" ແລະ "ໄດ້ຮັບຈາກສະຫວັນ."


generated on Thu Jul 10 08:45:04 2025

### ຄຳແນະນຳໃນການແປ

- ອີກວິທີໜຶ່ງຂອງການແປຄຳສັບນີ້ສາມາດລວມ, "ອາຫານທີ່ເປັນເກັດສີຂາວບາງ" ຫຼື "ອາຫານຈາກສະຫວັນ."
- ໃຫ້ພິຈາລະນາວ່າຄຳນີ້ໄດ້ຮັບການແປໃນພຣະຄໍາພີໃນພາສາທ້ອງຖິ່ນຫຼືໃນພາສາກາງວ່າເປັນຢ່າງໃດ.

## ມານາເຊ, ເຜົ່າມານັດເຊ

### ຂ້ເທັດຈິງ

ມີຜູ້ຊາຍຫ້າຄົນທີ່ມີຊື່ວ່າ ມານາເຊ ໃນພັນທະສັນຍາເດີມ:

- ມານາເຊ ເປັນຊື່ຂອງບຸດຊາຍຄົນທຳອິດຂອງໂຢເຊັບ.
- ທັງ ມານາເຊ ແລະນ້ອງຊາຍຂອງເຂົາຄື ເອຟຣາອິມ ຖືກຮັບເປັນບຸດບຸນທໍາໂດຍບິດາຂອງໂຢເຊັບ, ຄື ຢາໂຄບ
  ຊຶ່ງໄດ້ໃຫ້ສິດທິພິເສດແກ່ເຊື້ອສາຍຂອງພວກເຂົາໃນການໄດ້ຢູ່ທ່າມກາງຊົນຊາດອິດສະຣາເອນສິບສອງເຜົ່າ.
- ເຊື້ອສາຍຂອງ ມານາເຊ ເປັນໜຶ່ງໃນເຜົ່າຕ່າງໆຂອງອິດສະຣາເອນ.
- ເຜົ່າ ມານາເຊ ມັກຈະຖືກເອີ້ນວ່າເປັນ "ເຄິ່ງເຜົ່າຂອງ ມານາເຊ"
  ເພາະສ່ວນໜຶ່ງຂອງເຜົ່າໄດ້ຕັ້ງຮາກເຫົ້າຢູ່ໃນດິນແດນການາອານ,ທາງດ້ານຕາເວັນຕົກຂອງແມ່ນ້ຳຈໍແດນ.ອີກສ່ວນໜຶ່ງຂອງເຜົ່າໄດ້ຕັ້ງກົກຮາກໃນທາງດ
- ໜຶ່ງໃນບັນດາກະສັດຂອງຢູດາ ຊື່ວ່າ ມານາເຊ.
- ກະສັດ ມານາເຊ ເປັນກະສັດທີ່ຊົ່ວຮ້າຍທີ່ເອົາບັນດາບຸດຊາຍຂອງເຂົາເອງເຜົາເປັນເຄື່ອງບູຊາໃຫ້ແກ່ພຣະປອມ.
- ພຣະເຈົ້າຊົງລົງໂທດກະສັດມານາເຊ ໂດຍການຍອມໃຫ້ເຂົາຖືກຈັບຕົວໂດຍກອງທັບຂອງສັດຕູ,
  ມານາເຊໄດ້ຫັນກັບມາຫາພຣະເຈົ້າແລະທຳລາຍແທ່ນບູຊາທີ່ໃຊ້ນະມັດສະການພວກຮູບເຄົາລົບ.
- ຜູ້ຊາຍສອງຄົນທີ່ຊື່ວ່າ ມານາເຊ
  ມີຊີວິດຢູ່ໃນຊ່ວງຍຸກຂອງເອສະຣາ,ພວກເຂົາຄືຄົນທີ່ຕ້ອງປະຢ່າກັບພັນລະຍາຕ່າງສາດສະໜາເຫຼົ່ານັ້ນເພາະພວກນາງມີອິດທິພົນຕໍ່ພວກເຂົາໃນການນັບຖື
- ມານາເຊອີກຄົນໜຶ່ງເປັນປູ່ຂອງບາງຄົນໃນເຜົ່າດານທີ່ເປັນປະໂລຫິດຂອງຮູບເຄົາລົບຂອງພຣະປອມ.

## ມາຣີ, ມານດາຂອງພຣະເຢຊູ

### ຂ້ເທັດຈິງ

ມາຣີ ເປັນຜູ້ຍິງສາວທີ່ອາໃສຢູ່ໃນເມືອງນາຊາເຣັດ ຜູ້ທີ່ຖືກຜູກມັດໃຫ້ແຕ່ງງານກັບຜູ້ຊາຍທີ່ຊື່ໂຢເຊັບ.ພຣະເຈົ້າຊົງເລືອກ ມາຣີ
ໃຫ້ເປັນມານດາຂອງພຣະເຢຊູ ພຣະເມຊີອາ, ພຣະບຸດຂອງພຣະເຈົ້າ.

- ພຣະວິນຍານບໍລິສຸດໂດຍການອັດສະຈັນໄດ້ທຳໃຫ້ມາຣີຕັ້ງທ້ອງໃນຂະນະທີ່ນາງເປັນຍິງພົມມະຈາລີ.
- ທູດສະຫວັນໄດ້ບອກແກ່ ມາຣີ ວ່າທາລົກໃນທ້ອງຂອງນາງຄືພຣະບຸດຂອງພຣະເຈົ້າຂອງພຣະເຈົ້າແລະນາງຈະເອີ້ນຊື່ກຸມມານນັ້ນວ່າ
  ເຢຊູ.
- ມາຣີ ຮັກພຣະເຈົ້າແລະໄດ້ສັນລະເສີນພຣະອົງທີ່ໄດ້ໂປດປານນາງ.
- ໂຢເຊັບໄດ້ແຕ່ງງານກັບມາຣີ, ແຕ່ມາຣີ ຍັງຄົງເປັນຍິງພົມມະຈາລີຈົນເຖິງຫຼັງຈາກທາລົກໄດ້ຄອດອອກມາແລ້ວ.
- ມາຣີ ແລະໂຢເຊັບ, ໄດ້ນຳພຣະກຸມມານເຢຊູໄປຖະຫວາຍທີ່ພຣະວິຫານ.
  ຕໍ່ມາພວກເຂົາໄດ້ພາກັນໄປອີຢິບເພື່ອໜີຈາກຄຳສັ່ງຂອງເຮໂຣດທີ່ສັ່ງໃຫ້ຂ້າທາລົກ. ຫຼັງຈາກນັ້ນພວກເຂົາໄດ້ຍ້າຍກັບມາ ທີ່ນາຊາເຣັດ.
- ເມື່ອພຣະເຢຊູຊົງເປັນຜູ້ໃຫຍ່ແລ້ວ,ມາຣີ ໄດ້ຢູ່ກັບພຣະອົງເມື່ອພຣະອົງຊົງປ່ຽນນ້ຳ ໃຫ້ເປັນເຫຼົ້າອະງຸ່ນໃນງານສົມລົດທີ່ບ້ານການາ.
- ຂ່າວປະເສີດໄດ້ກ່າວວ່າ ມາຣີ
  ກໍໄດ້ຢູ່ທີ່ກາງແຂນເມື່ອພຣະເຢຊູກຳລັງຈະສິ້ນພຣະຊົນ.ພຣະອົງໄດ້ບອກໃຫ້ສາວົກໄດ້ດູແລນາງໃຫ້ເໝືອນແມ່ຂອງເຂົາ.

## ມາຣີ (ນ້ອງສາວຂອງມາທາ)

### ຂ້ເທັດຈິງ

ມາຣີ ເປັນຜູ້ຍິງທີ່ມາຈາກເບັດທານີ ທີ່ມາຕິດຕາມພຣະເຢຊູ.

- ມາຣີ ມີເອື້ອຍຊື່ວ່າ ມາທາ ແລະ ນ້ອງຊາຍຊື່ ລາຊາໂຣ ເຊິ່ງໄດ້ຕິດຕາມພຣະເຢຊູເຈົ້າຄືກັນ.
- ຄັ້ງໜຶ່ງ ພຣະເຢຊູເຈົ້າ ໄດ້ກ່າວວ່າ ມາຣີ ໄດ້ເລືອກສິ່ງທີ່ດີທີ່ສຸດເມື່ອລາວໄດ້ເລືອກເອົາການມານັ່ງຟັງພຣະອົງ
  ຫລາຍກວ່າການໄປຫຍຸ້ງຢູ່ກັບການຕຽມອາຫານ ແບບມາທາ ກຳລັງເຮັດຢູ່.
- ພຣະເຢຊູເຈົ້າ ໄດ້ເອົານ້ອງຊາຍຂອງມາຣີ ໃຫ້ກັບຄືນມາມີຊີວິດອີກ.
- ບາງເວລາຫລັງຈາກນັ້ນ, ຂະນະທີ່ພຣະເຢຊູເຈົ້າ ກຳລັງກິນເຂົ້າຢູ່ເຮືອນຂອງບາງຄົນໃນເບັດທານີ, ມາຣີ ໄດ້ຫານ້ຳຫອມລາຄາແພງ
  ໃສ່ພຣະບາດຂອງພຣະອົງ ເພື່ອເປັນການນະມັດ ສະການພຣະອົງ.


generated on Thu Jul 10 08:45:04 2025

- ພຣະເຢຊູເຈົ້າ ກ່າວຍ້ອງຍໍນາງທີ່ໄດ້ເຮັດແບບນີ້ ແລະ ໄດ້ບອກວ່າ ລາວກຳລັງຕຽມຮ່າງກາຍຂອງພຣະອົງ ສຳລັບການຝັງພຣະສົບ.

## ມາຣີ ຊາວມັກດາລາ

### ຂໍ້ເທັດຈິງ

ມາຣີ ຊາວມັກດາລາຄືໜຶ່ງໃນຈຳນວນຜູ້ຍິງຫຼາຍໆຄົນ ທີ່ເຊື່ອໃນພຣະເຢຊູແລະໄດ້ຕິດຕາມພຣະອົງໃນງານພັນທະກິດຂອງພຣະອົງ.
ນາງເປັນທີ່ຮູ້ຈັກໃນຖານະທີ່ເປັນຄົນທີ່ພຣະເຢຊູໄດ້ຮັກສາຈາກຜີປີສາດເຈັດໂຕທີ່ໄດ້ຄວບຄຸມນາງ.

- ມາຣີ ຊາວມັກດາລາແລະຜູ້ຍິງອື່ນບາງຄົນ
  ຊ່ວຍສະໜັບສະໜູນພຣະເຢຊູແລະພວກອັກຄະສາວົກຂອງພຣະອົງໂດຍຖວາຍແກ່ພວກເຂົາ.ນາງຖືກອ້າງເຖິງວ່າເປັນຜູ້ຍິງຄົນໜຶ່ງໃນກຸ່ມຜູ້ຍິງກຸ່ມທຳອິດທ
  ຫຼັງຈາກພຣະອົງຊົງເປັນຂຶ້ນມາຈາກຄວາມຕາຍ.
- ຂະນະທີ ມາຣີ ຊາວມັກດາລາ ໄດ້ຢືນຢູ່ນອກອຸໂມງທີ່ຫວ່າງເປົ່າ,
  ນາງໄດ້ເຫັນພຣະເຢຊູຊົງຢືນຢູ່ທີ່ນັ້ນແລະພຣະອົງໄດ້ຊົງບອກນາງໃຫ້ບອກສາວົກຄົນອື່ນໆ ວ່າພຣະອົງຊົງຟື້ນຄືນພຣະຊົນ.

## ມາລາກີ

### ຂໍ້ເທັດຈິງ

ມາລາກີຄືເປັນໜຶ່ງໃນບັນດາຜູ້ປະກາດພຣະວັດຈະນະຂອງພຣະເຈົ້າໃນອານາຈັກຢູດາ.ເຂົາໄດ້ມີຊີວິດປະມານ 500
ປີກ່ອນພຣະຄຣິດໄດ້ຢູ່ໃນໂລກ.

- ມາລາກີ
  ໄດ້ປະກາດພຣະວັດຈະນະໃນຊ່ວງລະຍະເວລາທີ່ພຣະວິຫານຂອງອິດສະຣາເອນກຳລັງຖືກສ້າງຂຶ້ນມາໃໝ່ຫຼັງຈາກທີ່ກັບມາຈາກການເປັນຊະເລີຍຂອງບ
- ເອຊະຣາແລະເນເຫມີຢາມີຊີວິດຢູ່ປະມານເວລາດຽວກັນກັບມາລາກີ.
- ພຣະທັມມາລາກີຄືພຣະທັມເຫຼັ້ມສຸດທ້າຍຂອງພັນທະສັນຍາເດີມ.
- ເຊັ່ນດຽວກັນກັບຜູ້ປະກາດພຣະວັດຈະນະທຸກຄົນໃນພັນທະສັນຍາເດີມ,ມາລາກີໄດ້ກະຕຸ້ນໃຫ້ປະຊົນກັບໃຈຈາກບາບຂອງພວກເຂົາແລະຫັນກັບມານະມັ

## ມາອາກາ

### ຂໍ້ເທັດຈິງ

ມາອາກາ (ຫຼືມາອາຄາ) ເປັນໜຶ່ງໃນບັນດາບຸດຊາຍຂອງນ້ອງຊາຍຂອງອັບບະຣາຮາມທີ່ມີຊື່ວ່າ ນາໂຮ.
ມີຄົນອື່ນໃນພັນທະສັນຍາເດີມທີ່ໃຊ້ຊື່ນີ້ດ້ວຍ.

- ເມືອງມາອາກາຫຼືເບັດມາອາກາ ຕັ້ງຢູ່ໄກໄປທາງເໜືອຂອງອິດສະຣາເອນໃນແຄ້ວນທີ່ຖືກຢຶດຄອງໂດຍຊົນເຜົ່າເນັບຫາລີ.
- ເປັນເມືອງທີ່ສຳຄັນແລະຖືກສັດຕູໂຈມຕີຫຼາຍຄັ້ງ.
- ມາອາກາ ຊື່ຂອງຜູ້ຍິງຫຼາຍຄົນລວມເຖິງມານດາຂອງບຸດຊາຍຂອງດາວິດທີ່ຊື່ວ່າ ອັບຊາໂລມ.
- ກະສັດ ອາສາໄດ້ປົດມາອາກາທີ່ເປັນແມ່ເຖົ້າຂອງເພິ່ນຈາກການເປັນລາຊີນີເພາະນາງສະໜັບສະໜູນການນະມັດສະການອາເຊຣາ.

## ມິຊະປາ

### ຂໍ້ເທັດຈິງ

ມິຊະປາ ແມ່ນຊື່ຂອງເມືອງຫລາຍເມືອງ ທີ່ປາກົດໃນພຣະຄັມພີເດີມ. ມີຄວາມໝາຍວ່າ, "ຈຸດຊົມວິວ" ຫລື "ຫໍຄອຍ."

- ຕອນທີ່ດາວິດຖືກໂຊນຕາມລ່າ, ລາວປະໃຫ້ພໍ່ແມ່ລາວຢູ່ເມືອງມິຊະປາ, ພາຍໃຕ້ການປົກຄອງຂອງກະສັດໂມອາບ.
- ເມືອງມິຊະປາ ຕັ້ງຢູ່ລະຫວ່າງຊາຍແດນຂອງອານາຈັກຢູດາ ແລະອິດສະຣາເອນ. ເປັນໃຈກາງຂອງກອງທັບໃຫຍ່.


generated on Thu Jul 10 08:45:04 2025

## ມີກາ

### ຂໍ້ເທັດຈິງ

ມີກາ ແມ່ນຜູ້ປະກາດພຣະທັມ ໃນອານາຈັກຢູດາ ປະມານ 700 ປີ ກ່ອນຄຣິສຕະສັກກະຣາດ,
ໃນເວລາດຽວກັນກັບຜູ້ປະກາດພຣະທັມເອຊາຢາ ຍັງເຮັດວຽກຢູ່ແຂວງຢູດາ. ຜູ້ຊາຍອີກຄົນໜຶ່ງທີ່ຊື ມີກາ
ແມ່ນມີຊີວິດຢູ່ໃນສະໄໝຂອງພວກຜູ້ປົກຄອງ.

- ພຣະທັມມີກາ ແມ່ນພຣະທັມທີ່ຢູ່ເກືອບທ້າຍໆ ຂອງພຣະຄັມພີເດີມ.
- ມີກາ ໄດ້ທຳນວາຍເຖິງການຫລົ້ມຈົມຂອງຊາວຊາມາເຣຍ ໂດຍຊາວອັດຊີເຣຍ.
- ມີກາ ໄດ້ກ່າວຕຳນິປະຊາຊົນຢູດາ ເພາະພວກເຂົາບໍ່ຟັງຄວາມພຣະເຈົ້າ ແລະ ໄດ້ເຕືອນພວກເຂົາວ່າ ສັດຕູຈະມາບຸກໂຈມຕີພວກເຂົາ.
- ໃນຄຳທຳນວາຍນັ້ນ ຍັງລົງທ້າຍດ້ວຍຖ້ອຍຄຳແຫ່ງຄວາມຫວັງໃນພຣະເຈົ້າ ຜູ້ຊົ່ງສັດຊື ແລະ ຈະຊ່ວຍກູ້ປະຊາຊົນຂອງພຣະອົງ.
- ໃນພຣະທັມພວກຜູ້ປົກຄອງ, ໄດ້ບອກເລື່ອງຂອງຜູ້ຊາຍຄົນໜຶ່ງທີ່ຊື ມີກາ ເຊິ່ງອາໃສຢູ່ໃນເຂດແດນເອຟຣາອິມ
  ເປັນຜູ້ທີ່ສ້າງຮູບເຄົາລົບຈາກເງິນ. ປະໂລຫິດທີ່ຍັງເປັນຄົນໜຸ່ມຄົນໜຶ່ງ ເຊິ່ງເປັນຊາວເລວີ ໄດ້ມາອາໃສຢູ່ກັບຊາຍຜູ້ນີ
  ແລະໄດ້ລັກເອົາຮູບເຄົາລົບ ແລະ ເຄື່ອງຂອງອື່ນໆ, ແລ້ວກໍໜີໄປກັບຊົນເຜົ່າດານ. ສຸດທ້າຍ ຊົນເຜົ່າດານແລະປະໂລຫິດໜຸ່ມຄົນນັ້ນ
  ກໍມາຕັ້ງຖິ່ນຖານຢູ່ເມືອງລາອິດ ແລະ ພວກເຂົາກໍໄດ້ເອົາຮູບເຄົາລົບທີ່ເຮັດຈາກເງິນນັ້ນມາຕັ້ງໄວ້ ເພື່ອນະມັດສະການ.

## ມີຄາເອນ

### ຂໍ້ເທັດຈິງ

ມີຄາເອນ ເປັນຫົວໜ້າຂອງພວກທູດສະຫວັນຜູ້ບໍຣິສຸດ, ເປັນທູດສະຫວັນທີ່ເຊື່ອຟັງ. ລາວແມ່ນທູດສະຫວັນຕົນດຽວ
ທີ່ຖືກບົ່ງບອກໂດຍກົ່ງວ່າເປັນ "ຫົວໜ້າທູດສະຫວັນ" ຂອງພຣະເຈົ້າ.

- ຄຳວ່າ "ຫົວໜ້າທູດສະຫວັນ" ຄວາມໝາຍຕາມໂຕອັກສອນແມ່ນ "ຫົວໜ້າຂອງທູດສະຫວັນ" ຫລື "ຜູ້ປົກຄອງທູດສະຫວັນ."
- ມີຄາເອນ ແມ່ນນັກຮົບ ທີ່ຕໍ່ສູ້ກັບສັດຕູຂອງພຣະເຈົ້າ ທັງຄຸ້ມຄອງຮັກສາປະຊາຊົນຂອງພຣະເຈົ້າ.
- ລາວໄດ້ນຳພາອິດສະຣາເອນ ຕໍ່ສູ້ກັບກອງທະຫານຂອງເປີເຊຍ. ໃນເວລາສຸດທ້າຍ ລາວຈະນຳພາກອງກຳລັງຂອງອິດສະຣາເອນ
  ໃນການຕໍ່ສູ້ເທື່ອສຸດທ້າຍກັບກອງກຳລັງຂອງຄວາມຊົ່ວຮ້າຍ ຕາມທີ່ໄດ້ທຳນວາຍໄວ້ໃນພຣະທັມດານີເອນ.
- ໃນພຣະຄັມພີ ມີຜູ້ຊາຍຫລາຍຄົນທີ່ຊື ມີຄາເອນ. ມີຜູ້ຊາຍຫລາຍຄົນທີ່ຖືກເອີ້ນວ່າເປັນ "ລູກຊາຍຂອງມີຄາເອນ."

## ມີຊາເອນ

### ຂໍ້ເທັດຈິງ

ມີຊາເອນ ແມ່ນຊື່ຂອງຜູ້ຊາຍສາມຄົນ ທີ່ຢູ່ໃນພຣະຄັມພີເດີມ.

- ມີຊາເອນ ຄົນໜຶ່ງແມ່ນພີ່ນ້ອງຂອງອາໂຣນ. ຕອນທີ່ລູກຊາຍສອງຄົນຂອງອາໂຣນ ຖືກພຣະເຈົ້າປະຫານຊີວິດ
  ຍ້ອນພວກເຂົານະມັດສະການຮູບເຄົາຣົບ ທີ່ພຣະເຈົ້າຫ້າມບໍ່ໃຫ້ເຮັດເດັດຂາດ, ມີຊາເອນ ແລະ ນ້ອງຊາຍຂອງລາວ
  ຖືກມອບໝາຍໃຫ້ເຮັດໜ້າທີ່ເອົາສິບອອກໄປໄວ້ຢູ່ນອກແຄ້ມຂອງຊາວອິດສະຣາເອນ.
- ຜູ້ຊາຍອີກຄົນໜຶ່ງທີ່ຊື ມີຊາເອນ ແມ່ນຄົນທີ່ຢືນຢູ່ຂ້າງເອຊະຣາ ຕອນທີ່ລາວກຳລັງເປີດອ່ານໜັງສືມ້ວນ ທີ່ໄດ້ຖືກຄົ້ນພົບອີກ
  ໃຫ້ແກ່ຄົນຫົວໄປ.
- ຕອນທີ່ຊົນຊາດອິດສະຣາເອນ ຖືກຈັບໄປເປັນຊະເລີຍໃນນະຄອນບາບີໂລນ, ຊາຍໜຸ່ມທີ່ຊື ມີຊາເອນ ກໍຖືກຈັບໄປນຳ
  ແລະໄດ້ຖືກບັງຄັບໃຫ້ຢູ່ໃນນະຄອນບາບີໂລນ. ຊາວບາບີໂລນ ໄດ້ໃສ່ຊື່ໃຫ້ລາວວ່າ, "ເມຊາກ." ລາວ, ແລະ ໝູ່ເພື່ອນຂອງລາວ, ຄື
  ອາຊາຣີຢາ (ຊັດຣາກ) ແລະ ຮານານີຢາ (ອາເບັດເນໂກ), ໄດ້ປະຕິເສດທີ່ຈະນະມັດສະການຮູບເຄົາຣົບຂອງກະສັດ
  ແລະໄດ້ຖືກໂຍນຖິ້ມເຂົ້າໄປໃນເຕົາໄຟ.

## ມີຊື່ສຽງ, ຜູ້ມີຊື່ສຽງ

### ນິຍາມ

ຄຳວ່າ“ ຜູ້ມີຊື່ສຽງ” ໝາຍເຖິງການມີຊື່ສຽງແລະມີຊື່ສຽງທີ່ໜ້າ ຊົມເຊີຍ.

- ບຸກຄົນ"ທີ່ມີຊື່ສຽງ"ແມ່ນຄົນທີ່ມີຊື່ສຽງແລະມີຄວາມນັບຖືສູງ.
- "ຄຳວ່າຊື່ສຽງ" ໂດຍສະເພາະແມ່ນ ໝາຍ ເຖິງຊື່ສຽງທີ່ດີເຊິ່ງເປັນທີ່ຮູ້ຈັກກັນຢ່າງກວ້າງຂວາງໃນໄລຍະເວລາດົນນານ.
- ເມືອງທີ່ມີຊື່ສຽງວ່າ "ມີຊື່ສຽງ" ມັກຈະມີຊື່ສຽງຍ້ອນຄວາມຮັ່ງມີແລະຄວາມຈະເລີນຮຸ່ງເຮືອງ.


generated on Thu Jul 10 08:45:04 2025

### ຄຳແນະນຳໃນການແປ

- ຄຳທີ່ວ່າ "ການມີຊື່ສຽງ" ຍັງສາມາດຖືກແປວ່າ "ຊື່ສຽງ" ຫລື "ຊື່ສຽງທີ່ນັບຖື" ຫຼື "ຄວາມຍິ່ງໃຫຍ່ເຊິ່ງເປັນທີ່ຮູ້ຈັກຂອງຄົນຫຼາຍໆຄົນ."
- ຄຳ ວ່າ "ທີ່ມີຊື່ສຽງ" ຍັງສາມາດແປເປັນ "ທີ່ມີຊື່ສຽງແລະມີກຽດຕິຍົດສູງ" ຫຼື "ມີຊື່ສຽງທີ່ດີເລີດ."
- ຄຳເວົ້າທີ່ວ່າ "ຂໍໃຫ້ຊື່ຂອງພຣະຜູ້ເປັນເຈົ້າຈົ່ງມີຊື່ສຽງໃນອິສະຣາເອນ" ສາມາດແປເປັນ "ຊື່ຂອງພຣະຜູ້ເປັນເຈົ້າໃຫ້ເປັນທີ່ຮູ້ຈັກແລະໃຫ້ກຽດແກ່ຊາວອິສະຣາເອນ."
- ປະໂຫຍກທີ່ວ່າ, "ຜູ້ຊາຍທີ່ມີຊື່ສຽງ" ສາມາດຖືກແປເປັນ, "ຜູ້ຊາຍທີ່ມີຊື່ສຽງຍ້ອນຄວາມກ້າຫານຂອງພວກເຂົາ" ຫຼື "ນັກຮົບທີ່ມີຊື່ສຽງ" ຫຼື "ຜູ້ຊາຍທີ່ມີຊື່ສຽງສູງ."
- ສຳນວນທີ່ວ່າ "ຊື່ສຽງຂອງທ່ານທີ່ມີຊື່ສຽງຕະຫຼອດທຸກຮຸ້ນຄົນ" ສາມາດແປເປັນ "ຕະຫຼອດປີທີ່ຜູ້ຄົນຈະໄດ້ຍິນກ່ຽວກັບຄວາມຍິ່ງໃຫຍ່ຂອງທ່ານ" ຫຼື "ຄວາມຍິ່ງໃຫຍ່ຂອງທ່ານໄດ້ຖືກເຫັນແລະໄດ້ຍິນຈາກຄົນໃນທຸກໆຮຸ້ນ."

## ມີດີອານ, ຊາວມີດີອານ

### ຂໍ້ເທັດຈິງ

ມີດີອານ ແມ່ນລູກຊາຍຂອງອັບຣາຮາມກັບນາງເກຕຸຣາ. ມັນຍັງແມ່ນຊື່ຂອງຊົນຊາດໜຶ່ງ ແລະ ບໍລິເວນທີ່ຕັ້ງຢູ່ທາງເໜືອຂອງທະເລຊາຍອາຣາເບຍ ຈົນຮອດທາງໃຕ້ຂອງແຜ່ນດິນການາອານ. ຄົນທີ່ຢູ່ໃນຊົນຊາດນີ ຖືກເອີ້ນວ່າ "ຊາວມີດີອານ."

- ເມື່ອໂມເຊ ໄດ້ອອກຈາກປະເທດເອຢິບເທື່ອທຳອິດ, ລາວໄດ້ໄປເຖິງເຂດແດນມີດີອານ ເຊິ່ງຢູ່ທີ່ນັ້ນ ລາວໄດ້ພົບກັບພວກລູກສາວຂອງເຢທະໂຣ ແລະໄດ້ຊ່ວຍເອົານ້ຳໃຫ້ສັດລ້ຽງຂອງພວກນາງ. ຕໍ່ມາ ໂມເຊກໍໄດ້ແຕ່ງງານກັບລູກສາວຄົນໜຶ່ງຂອງເຢທະໂຣ.
- ໂຢເຊັບ ຖືກຈັບໄປເປັນທາດຢູ່ປະເທດເອຢິບ ກໍໂດຍຊາວມີດີອານທີ່ເປັນພວກຄ້າຂາຍທາດ.
- ຫລາຍປີຕໍ່ມາ ຊາວມີດີອານໄດ້ບຸກໂຈມຕີ ແລະຢຶ້ນເອົາເຄື່ອງຂອງ ຂອງຊາວອິດສະຣາເອນໃນແຜ່ນດິນການາອານ. ກີເດໂອນ ຈຶ່ງໄດ້ນຳພາຊາວອິດສະຣາເອນຕໍ່ສູ້ກັບຊາວມີດີອານ.
- ຊົນເຜົ່າອາຫຣັບສະໄໝໃໝ່ຫລາຍຊົນເຜົ່າ ກໍສືບເຊື້ອສາຍມາຈາກກຸ່ມນີ.

## ມີຣີອາມ

### ຂໍ້ເທັດຈິງ

ມີຣີອາມ ເປັນເອື້ອຍກົກຂອງອາໂຣນ ແລະ ໂມເຊ.

- ຕອນທີ່ລາວຍັງເປັນເດັກຢູ່ນັ້ນ, ແມ່ຂອງມີຣີອາມ ໄດ້ບອກໃຫ້ລາວເຝົ້າຈອບເບິ່ງນ້ອງຊາຍຂອງລາວ ຄື ໂມເຊ ທີ່ຍັງເປັນເດັກນ້ອຍໆຢູ່ ແຕ່ຕ້ອງຖືກເຊື່ອງໄວ້ໃນອູ່ ແລະເອົາໄປປະໄວ້ໃນພຸ່ມຫຍ້າອ້ ໃນແມ່ນ້ຳນິນ. ເມື່ອລູກສາວຂອງກະສັດຟາໂຣມາພົບ ຈຶ່ງຢາກໄດ້ເດັກນ້ອຍຄົນນັ້ນໄປລ້ຽງ ແລະຈ່ຳເປັນຕ້ອງຫາຄົນມາລ້ຽງ ເພາະເດັກນັ້ນຍັງນ້ອຍຢູ່, ດັ່ງນັ້ນ ມີຣີອາມ ຈຶ່ງໄປພາແມ່ຂອງລາວມາເຮັດໜ້າທີ່ນີ.
- ມີຣີອາມ ໄດ້ພາຊາວອິດສະຣາເອນ ເຕັ້ນລຳຮ້ອງເພງ ເພື່ອສະແດງຄວາມຊົມຊື່ນຍິນດີ ແລະ ຂອບໃຈພຣະເຈົ້າ ທີ່ໄດ້ຊ່ວຍພວກເຂົາໃຫ້ຂ້ວາມທະເລແດງ ພົ້ນຈາກການໄລ່ຕາມມາຂອງທະຫານອີຢິບ.
- ຫລາຍປີຕໍ່ມາ ຊາວອິດສະຣາເອນທີ່ເດີນທາງວົນໄປວົນມາຢູ່ໃນທະເລຊາຍແຫ້ງແລ້ງ, ມີຣີອາມ ແລະ ອາໂຣນ ກໍເລີຍເວົ້າຮ້າຍໃສ່ໂມເຊ ຍ້ອນລາວໄປແຕ່ງງານກັບຜູ້ຍິງຊາວກູເຊ.
- ຍ້ອນບາງບໍ່ສັດຊື ແລະ ເວົ້າຮ້າຍໃສ່ໂມເຊ, ພຣະເຈົ້າ ຈຶ່ງສາບແຊ່ງມີຣີອາມ ໃຫ້ເປັນພະຍາດຂີ້ເຮື້ອນ. ແຕ່ຕໍ່ມາພາຍຫລັງ ພຣະເຈົ້າ ກໍໄດ້ຊ່ວຍໃຫ້ລາວດີພະຍາດ ເພາະຄຳທູນຂໍຂອງໂມເຊເພື່ອລາວ.

## ມີເລ້ຫລ້ຽມ

### ນິຍາມ

ຄຳວ່າ "ມີເລ້ຫລ້ຽມ" ອະທິບາຍເຖິງບຸກຄົນທີ່ມີປັນຍາ ສະຫລຽວສະຫລາດ, ໂດຍສະເພາະທາງພາກປະຕິບັດ.

- ຫລາຍຄັ້ງທີ່ຄຳວ່າ "ມີເລ້ຫລ້ຽມ" ມີຄວາມໝາຍບາງສ່ວນທີ່ເປັນແງ່ລົບ ເພາະຄຳນີ້ມັກລວມເຖິງການເຫັນແກ່ໂຕ.
- ຄົນມີເລ້ຫລ້ຽມມັກເນັ້ນໄປທີ່ການຊ່ວຍເຫລືອໂຕເອງ, ບໍ່ສົນໃຈຜູ້ອື່ນ.


generated on Thu Jul 10 08:45:04 2025

- ວິທີອື່ນທີ່ຈະແປຄໍານີ້ສາມາດລວມຄໍາວ່າ "ເຈົ້າເອ໋ ຫລື "ເຈົ້າມານຍໆ" ຫລື "ຫລັກແຫລມ" ຫລື "ສະຫລາດ," ຂຶ້ນຢູ່ກັບສະຖານະການ.

## ມື, ມືຂວາ, ສິ່ງມອບໃຫ້

### ນິຍາມ

ມີວິທີອຸປະມາອຸປະໄມຫລາຍຢ່າງທີ່ "ມື" ຖືກໃຊ້ໃນພຣະຄໍາພີ:

- ຄໍາວ່າ "ສິ່ງມອບໃຫ້" ບາງສິ່ງແກ່ບາງຄົນໝາຍເຖິງການວາງບາງສິ່ງໃນມືຂອງບຸກຄົນ.
- ຄໍາວ່າ "ສິ່ງໃຫ້" ມັກຈະຖືກໃຊ້ໃນການອ້າງອີງເຖິງຣິດອໍານາດແລະການກະທໍາຂອງພຣະເຈົ້າເຊັ່ນວ່າ ເມື່ອພຣະເຈົ້າກ່າວວ່າ "ມືຂອງເຮົາບໍ່ໄດ້ສ້າງ

ສິ່ງທັ້ງໝົດເຫລົ່ານີ້ຫລື ? "

- ຄໍາກ່າວ "ສິ່ງມອບໃຫ້" ຫລື "ມອບໄວ້ໃນມືຂອງ" ອ້າງເຖິງການເຮັດໃຫ້ບາງຄົນທີ່ຢູ່ພາຍໃຕ້ການຄວບຄຸມຫລືອໍານາດຂອງຄົນອື່ນ.
- ການວາງມືເທິງຄົນໜຶ່ງຫລາຍຄັ້ງໄດ້ເຮັດໃນຂະນະທີ່ອວຍພອນເໝືອບຸກຄົນນັ້ນ.
- ຄໍາວ່າ "ວາງມື" ອ້າງເຖິງການວາງມືເທິງບຸກຄົນເພື່ອທີ່ຈະມອບໝາຍໃຫ້ບຸກຄົນນັ້ນໃນການຮັບໃຊ້ງານຂອງພຣະເຈົ້າ ຫລື ອະທິຖານເພື່ອສໍາລັບການຮັກສາໂຣກ.
- ການໃຊ້ຄໍາວ່າ " ມື" ໃນຄໍາອຸປະມາອຸປະໄມອື່ນໆລວມເຖິງ:
- "ວາງມືຂ້າງເທິງ" ໝາຍເຖິງ "ບຸກຄົນທີ່ເຮັດຜິດບາບ."
- ການ "ຊ່ວຍເຫລືອໃຫ້ພົ້ນຈາກມືຂອງ" ໝາຍເຖິງການຢຸດບາງຄົນຈາກການເຮັດຜິດແກ່ຄົນອື່ນ.
- ການ "ຢູ່ໃກ້ມື" ໝາຍເຖິງການ "ຢູ່ໃກ້ໆ."
- ຕໍາແໜ່ງຂອງການຢູ່ທີ່ "ມືຂວາ" ໝາຍເຖິງ "ຢູ່ທີ່ເບື້ອງຂວາ" ຫລື "ຂ້າງຂວາ."
- ຄໍາວ່າ "ໂດຍມືຂວາ" ບາງຄົນໝາຍເຖິງ "ໂດຍ" ຫລື "ຜ່ານທາງ" ການກະທໍາຂອງຄົນນັ້ນ ຍົກຕົວຢ່າງເຊັ່ນ, "ໂດຍພຣະຫັດຂອງພຣະຜູ້ເປັນເຈົ້າ" ໝາຍເຖິງວ່າອົງພຣະຜູ້ເປັນເຈົ້າຊົງກະທໍາໃຫ້ບາງສິ່ງເກີດຂຶ້ນ.
- ເມື່ອໄປໂລກ່າວວ່າ "ຂຽນໂດຍມືຂອງຂ້າພະເຈົ້າ," ໝາຍຄວາມວ່າສ່ວນນີ້ຂອງຈົດໝາຍຖືກຂຽນຂຶ້ນໂດຍທ່ານເອງ, ບໍ່ແມ່ນໃຫ້ຄົນອື່ນຂຽນຕາມຄໍາບອກ.

### ຄໍາແນະນໍາໃນການແປ

- ສໍານວນເຫລົ່ານີ້ແລະໂວຫານອື່ນໆ ສາມາດແປໂດຍການໃຊ້ສໍານວນອຸປະມາອຸປະໄມອື່ນໆທີ່ມີຄວາມໝາຍດຽວກັນ. ຫລືຄວາມໝາຍສາມາດຖືກແປໂດຍການໃຊ້ພາສາ, ຕາມຕົວອັກສອນ

## ມືຂວາ,ເບື້ອງຂວາ

### ນິຍາມ

ຄໍາສະແດງທີ່ເປັນຕົວເລກທີ່ວ່າ "ມືຂວາ" ໝາຍ ເຖິງສະຖານທີ່ແຫ່ງກຽດຕິຍົດຫລື ກໍາ ລັງທີ່ຢູ່ເບື້ອງຂວາຂອງຜູ້ປົກຄອງຫລືບຸກຄົນ ສໍາ ຄັນອື່ນໆ.

- ມືຂວາກໍ່ຖືກໃຊ້ເປັນສັນຍາລັກຂອງ ອໍາ ນາດ, ສິດ ອໍາ ນາດ, ຫລື ກໍາ ລັງແຮງ.
- ພຣະຄໍາພີພັນລະນາວ່າພຣະເຢຊູຄຣິດນັ່ງ“ ຢູ່ເບື້ອງຂວາມືຂອງ” ພະເຈົ້າພະບິດາໃນຖານະເປັນຫົວໜ້າຂອງອ່ານກາຍຂອງຜູ້ທີ່ເຊື່ອ (ຄຣິສຕະຈັກ) ແລະເປັນຜູ້ຄວບຄຸມເປັນຜູ້ປົກຄອງການສ້າງທັ້ງໝົດ.
- ມືຂວາຂອງຄົນຖືກໃຊ້ເພື່ອສະແດງກຽດຕິຍົດພິເສດເມື່ອຖືກໃສ່ເທິງຫົວຂອງຜູ້ໃດຜູ້ ໜຶ່ງ ທີ່ໄດ້ຮັບພອນ (ຄືກັບວ່າພໍ່ຂອງຍາໂຄບໄດ້ອວຍພອນອີຟະຣາອິມຊາຍຂອງໂຢເຊັບ).
- ການ“ ຮັບໃຊ້ຢູ່ເບື້ອງຂວາມື” ຂອງຜູ້ໃດຜູ້ໜຶ່ງໝາຍຄວາມວ່າ ເປັນຜູ້ທີ່ມີການຮັບໃຊ້ໂດຍສະເພາະແລະມີຄວາມສໍາຄັນຕໍ່ບຸກ ຄົນນັ້ນ.

### ຄໍາແນະນໍາໃນການແປ

- ບາງຄັ້ງຄໍາວ່າ "ມືຂວາ" ທີ່ຮູ້ໜັງສືກໍ່ໝາຍເຖິງມືຂວາຂອງຄົນ, ຄືກັບວ່າທະຫານໂຣມໄດ້ເອົາພະນັກງານເຂົ້າໄປໃນມືຂວາຂອງພຣະເຢຊູເພື່ອເຢາະເຍີ້ຍລາວ. ສິ່ງນີ້ຄວນຖືກແປໂດຍໃຊ້ຄໍາສັບທີ່ພາສາໃຊ້ເພື່ອອ້າງອີງໃສ່ມືນີ້.
- ກ່ຽວກັບການນໍາໃຊ້ຕົວເລກ, ຖ້າສໍານວນທີ່ປະກອບມີຄໍາວ່າ "ມືຂວາ" ບໍ່ມີຄວາມໝາຍດຽວກັນກັບພາສາໂດຍການ, ຫຼັງຈາກນັ້ນໃຫ້ພິຈາລະນາວ່າພາສານັ້ນມີການສະແດງອອກທີ່ມີຄວາມ ໝາຍ ດຽວກັນຫຼືບໍ່.


generated on Thu Jul 10 08:45:04 2025

- ສໍານວນທີ່ວ່າ "ຢູ່ເບື້ອງຂວາມື" ສາມາດຖືກແປວ່າ "ຢູ່ເບື້ອງຂວາ" ຫລື "ໃນສະຖານທີ່ທີ່ມີກຽດຕິຍົດຂ້າງ" ຫລື "ໃນຖານະຂອງຄວາມເຂັ້ມແຂງ" ຫລື "ຜ້ອມທີ່ຈະຊ່ວຍເຫຼືອ."
- ວິທີການແປ "ດ້ວຍມືຂວາຂອງລາວ" ສາມາດປະກອບມີ, "ກັບສິດອໍານາດ" ຫລື"ໃຊ້ອໍານາດ" ຫລື "ດ້ວຍຄວາມເຂັ້ມແຂງທີ່ຫນ້າຕື່ນຕາຕື່ນໃຈຂອງລາວ."
- ຄໍາສະແດງທີ່ເປັນຕົວເລກທີ່ວ່າ "ມືຂວາແລະແຂນອັນແຮງຂອງພຣະອົງ" ໃຊ້ສອງທາງໃນການເນັ້ນໜັກເຖິງອໍານາດແລະ ກໍາລັງທີ່ຍິ່ງໃຫຍ່ຂອງພຣະເຈົ້າ. ວິທີໜຶ່ງທີ່ຈະແປຄວາມໝາຍນີ້ອາດແມ່ນ "ພະລັງແລະຄວາມສາມາດອັນຍິ່ງໃຫຍ່ຂອງພຣະອົງ."

## ມົງກຸດ,ສວມມົງກຸດ

### ນິຍາມ

ມົງກຸດເປັນຂອງຕົກແຕ່ງ ໝວກຊຶ່ງກົມໃສ່ເທິງຫົວຂອງພວກຜູ້ປົກຄອງ ເຊັ່ນພວກກະສັດແລະຣາຊີນີ ຄໍາວ່າ "ສວມມົງກຸດ" ໝາຍເຖິງການສວມມົງກຸດເທິງຫົວຂອງໃຜບາງຄົນ ປຽບທຽບໝາຍເຖິງ"ເພື່ອເປັນກຽດ"

- ມົງກຸດມັກຈະເຮັດດ້ວຍທອງຄໍາ ຫຼື ເງິນ ແລະອັນຍະມະນີລ້ໍາຄ່າເຊັ່ນ ພວກມໍຣະກົດແລະທັບທິມ
- ມົງກຸດມີວັດຖຸປະສົງເພື່ອເປັນສັນຍາລັກ ຂອງອໍານາດແລະ

ຄວາມມັ່ງຄັ່ງຂອງກະສັດ.

- ຕົ່ງກັນຂ້າມມົງກຸດທີ່ທໍາຈາກກິ່ງກ້ານໜ້າມ ທີ່ທະຫານໂຣມ

ສວມໃສ່ໄວ້ເທິງຫົວຂອງພຣະເຢຊູ ມີຈຸດປະສົງເພື່ອເຢາะເຍີ້ຍ ແລະທໍາລາຍພຣະອົງ.

- ໃນສະໄໝບູຮານ ຜູ້ຊະນະການແຂ່ງຂັນກີລາ ຈະໄດ້ຮັບມົງ

ກຸດທີ່ເຮັດຈາກກິ່ງໝາກກອກ ອັກຄະສາວົກ ໂປໂລ ກ່າວເຖິງມົງກຸດນີ ໃນຈົດໝາຍສະບັບທີສອງຂອງທ່ານເຖິງ ຕີໂມທຽວ

- ໃຊ້ໃນການປຽບທຽບ "ສວມມົງກຸດ" ໝາຍເຖິງການໃຫ້ກຽດບາງຄົນ ເຮົາເຄົາຣົບພຣະເຈົ້າດ້ວຍການເຊື່ອຟັງແລະສັນລະເສີນພຣະອົງ ຕໍ່ຜູ້ອື່ນ ນີເປັນເໝືອນການສວມມົງກຸດໃຫ້ພຣະອົງແລະຍອມຮັບວ່າ ພຣະອົງເປັນກະສັດ.
- ໂປໂລເອີ້ນບັນດາເພື່ອນຮ່ວມຄວາມເຊື່ອຂອງທ່ານວ່າ

" ຊົມຊື່ນຍິນດີແລະສວມມົງກຸດ" ໃນຄໍາກ່າວນີ "ມົງກຸດ"ຖືກໃຊ້ເພື່ອປຽບທຽບ ໝາຍເຖິງວ່າ ໂປໂລ ໄດ້ມີຄວາມສຸກແລະໄດ້ຮັບກຽດຢ່າງສູງໂດຍວິທີທີ່ບັນດາຜູ້ເຊື່ອເຫຼົ່ານີ ຍັງຄົງຢຶດໝັ້ນໃນການຮັບໃຊ້ພຣະເຈົ້າ.

- ເມື່ອໃຊ້ໃນການປຽບທຽບ "ມົງກຸດ" ອາດແປເປັນ"ລາງວັນ" ຫຼື"ກຽດ" ຫຼື " ສິ່ງທີ່ຕອບແທນ"ກໍໄດ້ .
- ການໃຊ້ ໃນຫໍານອງປຽບທຽບ"ສວມມົງກຸດ"ອາດແປວ່າ

"ໃຫ້ກຽດ"ຫຼື "ຕົກແຕ່ງ"

- ຖ້າບຸກຄົນໃດໄດ້ "ຖືກສວມມົງກຸດ" ນີອາດແປວ່າ "ມົງກຸດ

ຖືກສວມເທິງຫົວຂອງເຂົາ" .

- ຄໍາກ່າວວ່າ "ເຂົາໄດ້ຮັບການສວມມົງກຸດດ້ວຍສະຫງ່າລາສີ

ແລະກຽດຕິຍົດ" ສາມາດແປໄດ້ວ່າ "ພຣະສະຫງ່າລາສີແລະກຽດຕິຍົດ" ໄດ້ມອບໃຫ້ແກ່ເຂົາ" ຫຼື "ເຂົາໄດ້ຮັບສະຫງ່າລາສີແລະກຽດຕິຍົດ"

## ມົດຍອບ

### ນິຍາມ

ມົດຍອບຄືນ້ໍາມັນຫຼືເຄື່ອງເທດເຊິ່ງທໍາມາຈາກຢາງຂອງຕົ້ນມົດຍອບເຊິ່ງປູກໃນທະວີບອະຟຣິກາແລະເອເຊຍ ມັນກ່ຽວພັນກັບກໍາຍານ.

- ມົດຍອບຖືກໃຊ້ເປັນທູບ ນ້ໍາຫອມແລະຢາແລະຕຽມຮ່າງກາຍຂອງຄົນຕາຍກ່ອນທໍາການຝັງ.
- ມົດຍອບຄືໜຶ່ງໃນເຄື່ອງບັນນາການທີ່ບັນ ດາໂຫລາຈານ ໄດ້ຖວາຍໃຫ້ແກ່ພຣະເຢຊູເຈົ້າເມື່ອພຣະອົງຊິ່ງບັ້ງເກີດ.
- ພຣະເຢຊູເຈົ້າໄດ້ຮັບການມອບເຫລົ້າອງຸ່ນປະສົມກັບມົດຍອບເພື່ອຈະລະງັບຄວາມເຈັບປວດເມື່ອພຣະອົງຊິ່ງຖືກຄຶງທີ່ໄມ້ກາງແຂນ.


generated on Thu Jul 10 08:45:04 2025

## ມິດລູກ, ພີກລູກ

### ນິຍາມ

ຄຳວ່າ "ມິດລູກ" ໝາຍເຖິງບ່ອນທີ່ເດັກນ້ອຍເຕີບໂຕພາຍໃນຄັນຂອງມານດາ.

- ນີ້ຄືຄຳສັບເກົ່າບູຮານ ຊຶ່ງບາງຄັ້ງໃຊເວົ້າຄຳນີເພື່ອຄວາມສຸພາບແລະບໍ່ໄດ້ເວົ້າຕົງໆ
- ຄຳສັບໃໝ່ສຳລັບມິດລູກ ຄື "ມິດລູກ"
- ບາງພາສາໃຊ້ຄຳເວົ້າວ່າ "ທ້ອງ" ເພື່ອໝາຍເຖິງຄັນຂອງຜູ້ຍິງ ຫຼືມິດລູກ.
- ໃຫ້ໃຊ້ຄຳນີໃນພາສາເກົ່າໝາຍ ເຖິງເປັນທີ່ຮູ້ຈັກກັນດີເປັນຫຳມະຊາດແລະເປັນທີ່ຍອມຮັບ.

## ມົນທິນ

### ນິຍາມ

ຄຳວ່າ“ ຄວາມມົນທິນ” ໝາຍເຖິງຄວາມບົກຜ່ອງທາງຮ່າງກາຍຫລືຄວາມບໍ່ສົມບູນແບບຕໍ່ສັດຫລືຄົນ. ມັນຍັງສາມາດໃຫ້ໝາຍ ເຖິງຄວາມບໍ່ສົມບູນທາງວິນຍານແລະຄວາມຜິດຂອງຄົນເຮົາ.

- ສຳລັບການເສຍສະລະບາງຢ່າງ, ພຣະເຈົ້າໄດ້ແນະ ນຳຊາວອິດສະລາແອນໃຫ້ນຳສັດທີ່ບໍ່ມີຂໍ້ບົກຜ່ອງຫລືມີຂໍ້ບົກຜ່ອງມາຖວາຍ.
- ຜູ້ທີ່ເຊື່ອໃນພຣະຄຣິດໄດ້ຖືກຊຳລະລ້າງຈາກບາບຂອງພວກເຂົາໂດຍພຣະໂລຫິດຂອງພຣະອົງແລະຖືວ່າບໍ່ມີມົນທິນ.
- ວິທີການແປ ຄຳສັບນີ້ອາດປະກອບມີ, "ຄວາມບົກຜ່ອງ" ຫລື "ຄວາມບໍ່ສົມບູນແບບ" ຫລື "ບາບ," ຂຶ້ນກັບສະພາບການ.

## ມ້າ

### ນິຍາມ

ມ້າຄືສັດສີ່ຂາ, ຂະໜາດໃຫຍ່ທີ່ໃນສະໄໝພຣະຄຳພີຖືກໃຊ້ໃນການເຮັດສວນແລະຂົນສົ່ງຜູ້ຄົນ.

- ມ້າບາງໂຕຖືກໃຊ້ໃນການລາກກວ້ຽນຫລືລົດມ້າເສີກ, ໃນຂະນະທີ່ໂຕອື່ນໆຖືກໃຊ້ໃນການບັນທຸກຄົນຂີ່ແຕ່ລະຄົນ.
- ມ້າມັກຈະມີບັ້ງຫຽນໄວ້ເທິງຫົວຂອງພວກມັນເພື່ອຈະສາມາດຄວບຄຸມພວກມັນໄດ້.
- ໃນພຣະຄຳພີ, ຈະຖືວ່າມ້າເປັນຊັບສົມບັດທີ່ມີຄ່າແລະເປັນສິ່ງທີ່ຊີ້ວັດຄວາມລ້ຳລວຍ, ເພາະວ່າມັນຖືກໃຊ້ໃນສົງຄາມເປັນຫລັກ. ຍົກຕົວຢ່າງເຊັ່ນ ກະສັດໂຊໂລໂມນມີມ້າຫລາຍພັນໂຕແລະລົດມ້າເສີກຈຳນວນຫລວງຫລາຍ.
- ສັດທີ່ຄ້າຍກັບມ້າຄື ລາແລະລໍ.

## ຢາເຟດ

### ຂໍ້ເທັດຈິງ

ຢາເຟດ ເປັນຄົນໜຶ່ງໃນລູກຊາຍສາມຄົນຂອງໂນອາ

- ໃນໄລຍະທີ່ນ້ຳຖ້ວມໂລກ ຈົນແຜ່ນດິນຖືກປົກຄຸມໄປດ້ວຍນ້ຳ, ຢາເຟດແລະອ້າຍນ້ອງສອງຄົນຂອງລາວ ຢູ່ກັບໂນອາໃນເຮືອ, ພ້ອມກັບເ
  ມັຍຂອງພວກເຂົາ.
- ລູກຊາຍທັງຫລາຍຂອງໂນອາມັກຈະຖືກຈັດເຂົ້າໃນລຳດັບທີ່ວ່າ "ເຊມ, ຮາມ, ແລະຢາເຟດ." ນີ້ສະແດງວ່າ ຢາເຟດ
  ເປັນລູກຊາຍຫລ້າ.

## ຢາໂກໂບ (ນ້ອງຊາຍຂອງພຣະເຢຊູ)

### ຂໍ້ເທັດຈິງ

ຢາໂກໂບ ເປັນລູກຊາຍຂອງມາຣີແລະໂຢເຊັບ. ລາວແມ່ນໜຶ່ງ ໃນນ້ອງຊາຍຂອງພຣະເຢຊູເຈົ້າ.

- ພວກນ້ອງອີກເຄິ່ງໜຶ່ງຂອງພຣະເຢຊູຄຣິດເຈົ້າ ແມ່ນ ໂຢເຊັບ, ຢູດາ, ແລະຊີໂມນ.
- ໃນໄລຍະການດຳເນີນຊີວິດຂອງພຣະເຢຊູເຈົ້າ, ຢາໂກໂບ ແລະພີ່ນ້ອງຂອງລາວ ບໍ່ເຊື່ອວ່າພຣະເຢຊູຄຣິດເຈົ້າ ເປັນພຣະເມຊີອາ.
- ຕໍ່ມາ, ຫລັງຈາກທີ່ພຣະເຢຊູເຈົ້າ ເປັນຄືນມາຈາກຄວາມຕາຍ, ຢາໂກໂບຈຶ່ງເຊື່ອໃນພຣະອົງ
  ແລະໄດ້ກາຍມາເປັນຜູ້ນຳຂອງຄຣິສະຕະຈັກໃນນະຄອນເຢຣູຊາເລັມ.


generated on Thu Jul 10 08:45:04 2025

- ໃນພຣະສັນຍາໃໝ່ ພຣະທັມຢາໂກໂບ ເປັນຈົດໝາຍທີ່ຢາໂກໂບໄດ້ຂຽນສົ່ງໄປເຖິງຄຣິດສະຕຽນ ທີ່ໝີ່ໄປປະເທດອື່ນໆ ຍ້ອນປົ່ນໜີຈາກການຖືກກົດຂີ່ຂົ່ມເຫັ່ງ.

## ຢາໂກໂບ (ລູກຊາຍຂອງອາລະຟາຍ)

### ຂ້ເທັດຈິງ

ຢາໂກໂບ, ລູກຊາຍຂອງອາລະຟາຍ, ເປັນຄົນໜຶ່ງໃນອັກຄະສາວົກສິບສອງຄົນຂອງພຣະເຢຊູຄຣິດເຈົ້າ.

- ຊື່ລາວມີຢູ່ໃນລາຍຊື່ຂອງສາວົກຂອງພຣະເຢຊູຄຣິດເຈົ້າ ໃນຂ່າວປະເສີດຂອງພຣະທັມມັດທາຍ, ມາຣະໂກ, ແລະລູກາ.
- ລາວຍັງຖືກກ່າວເຖິງໃນພຣະທຳກິດຈະການ ໃນຖານະທີ່ເປັນໜຶ່ງໃນສາວົກສິບເອັດຄົນ ທີ່ມາອະທິຖານຮ່ວມກັນໃນມະຄອນເຢຣູຊາເລັ້ມ ຫລັງຈາກທີ່ພຣະເຢຊູເຈົ້າ ສະເດັດຂຶ້ນສູ່ສະຫວັນແລ້ວ.

## ຢາໂກໂບ (ລູກຊາຍຂອງເຊເບດາຍ)

### ຂ້ເທັດຈິງ

ຢາໂກໂບ, ລູກຊາຍຂອງເຊເບດາຍ ເປັນໜຶ່ງໃນອັກຄະສາວົກສິບສອງຄົນຂອງພຣະເຢຊູເຈົ້າ. ລາວມີນ້ອງຊາຍຄົນໜຶ່ງ ຊື່ວ່າໂຢຮັນ ເຊິ່ງເປັນໜຶ່ງໃນອັກຄະສາວົກຂອງພຣະເຢຊູເຈົ້າຄືກັນ.

- ຢາໂກໂບແລະໂຢຮັນ ນ້ອງຊາຍຂອງລາວ ເຮັດວຽກໂດຍການຫາປາ ຮ່ວມກັບເຊເບດາຍ ພໍ່ຂອງພວກລາວ.
- ຢາໂກໂບແລະໂຢຮັນ ມີຊື່ຫລິ້ນວ່າ "ລູກຟ້າຮ້ອງ," ບາງເທື່ອຍ້ອນວ່າພວກເຂົາເປັນຄົນຮ້າຍໄວ.
- ເປໂຕ, ຢາໂກໂບ, ແລະໂຢຮັນ ເປັນອັກຄະສາວົກທີ່ໃກ້ຊິດກັບພຣະເຢຊູເຈົ້າຫຼາຍທີ່ສຸດ ແລະໄດ້ຢູ່ກັບພຣະອົງໃນເຫດການທີ່ໜ້າງຶດງໍ້ເຊັ່ນ ຕອນທີ່ພຣະເຢຊູຢູ່ເທິງເນີນພູກັບເອລີຢາແລະໂມເຊ ແລະເຫດການທີ່ພຣະເຢຊູເຈົ້າ ເຮັດໃຫ້ເດັກຍິງທີ່ຕາຍແລ້ວກັບຄືນມາມີຊີວິດອີກ.
- ນີ້ແມ່ນຄົນລະຄົນກັບຢາໂກໂບ ທີ່ຂຽນໜັງສືໃນພຣະຄໍາພີ. ໃນບາງພາສາ ອາດຈະຂຽນຊື່ຂອງພວກເຂົາຕ່າງກັນ ເພື່ອເຮັດໃຫ້ເຂົ້າໃຈງ່າຍຂຶ້ນວ່າບໍ່ແມ່ນຄົນດຽວກັນ.

## ຢາໂຄບ,ອິດສະຣາເອນ

### ຂ້ເທັດຈິງ

ຢາໂຄບເປັນລູກຝາແຝດຜູ້ນ້ອງຂອງອີຊາກແລະເຣເບກາ.

- ຊື່ຂອງຢາໂຄບມີຄວາມໝາຍວ່າ " ຈັບສົ້ນໜ່ອງ"ຊຶ່ງເປັນຄໍາເວົ້າທີ່ໝາຍຄວາມວ່າ, " ລາວຫຼອກລວງ." ເມື່ອຢາໂຄບກໍາລັງເກີດມາ, ລາວໄດ້ຈັບສົ້ນໜ່ອງຂອງຄູ່ຝາແຝດຂອງລາວຄືເອຊາວ.
- ຫຼາຍປີຕໍ່ມາ, ພຣະເຈົ້າໄດ້ປ່ຽນຊື່ຂອງຢາໂຄບເປັນ " ອິດສະຣາເອນ, " ເຊິ່ງໝາຍຄວາມວ່າ, " ລາວປໍ້ສູ້ກັບພຣະເຈົ້າ."
- ຢາໂຄບ ເປັນຄົນສະຫຼາດ ແລະມີເລ້ຫຼ່ຽມ. ລາວຫາວິທີທີ່ຈະຍາດເອົາພຣະພອນຂອງລູກຊາຍກົກ ແລະເອົາກໍາມະສິດໃນການຮັບມໍລະດົກຂອງອ້າຍລາວຄື, ເອຊາວ.
- ເອຊາວ ຢາກຮ້າຍ ແລະໄດ້ວາງແຜນຂ້າລາວ, ດັ່ງນັ້ນ ຢາໂຄບຈຶ່ງໄດ້ອອກຈາກບ້ານເກີດເມືອງນອນໄປ. ແຕ່ຫຼາຍປີຕໍ່ມາ ຢາໂຄບໄດ້ກັບຄືນມາພ້ອມເມັຍແລະລູກຫຼານເຂົ້າສູ່ແຜ່ນດິນການາອານ ທີ່ເອຊາວໄດ້ອາໃສຢູ່, ແລະຄອບຄົວຂອງລາວທັ້ງສອງ ກໍອາໃສຢູ່ຮ່ວມກັນດ້ວຍຄວາມສະຫງົບສຸກ.
- ຢາໂຄບ ມີລູກຊາຍສິບສອງຄົນ. ເຊື້ອສາຍຂອງພວກເຂົາໄດ້ກາຍມາເປັນຄົນສິບສອງເຜົ່າຂອງອິດສະຣາເອນ.
- ມີຊາຍຄົນອື່ນອີກທີ່ມີຊື່ວ່າ ຢາໂຄບ ຕາມລໍາດັບເຊື້ອວົງຂອງໂຢເຊັບ ໃນພຣະທັມມັດທາຍ.

## ຍິວ, ສາສະໜາຍິວ, ຊາວຍິວ

### ນິຍາມ

ຊາວຍິວແມ່ນຄົນທີ່ເປັນເຊື້ອສາຍຂອງຫຼານຍັບຣາຮາມຄື: ຢາໂຄບ. ຄໍາວ່າ ”ຍິວ” ມາຈາກຄໍາວ່າ ”ຢູດາ.”

- ຜູ້ຄົນເລີ່ມເອີ້ນຊາວອິດສະຣາເອນວ່າ ”ຊາວຍິວ” ຫຼັງຈາກທີ່ພວກເຂົາກັບຄືນມາຢູດາຈາກການເນລະເທດຂອງພວກເຂົາໃນບາບີໂລນ.
- ພຣະເຢຊູພຣະເມຊີອາຊຶ່ງເປັນຍິວ. ເຖິງຢ່າງໃດກໍຕາມຜູ້ນໍາທາງສາສະໜາຍິວປະຕິເສດພຣະເຢຊູແລະຮຽກຮ້ອງໃຫ້ພຣະອົງຖືກປະຫານຊີວິດ.


generated on Thu Jul 10 08:45:04 2025

- ຄຳເວົ້າທີ່ວ່າ "ຊາວຢິວ" ມັກເວົ້າເຖິງຜູ້ນຳຂອງຊາວຢິວ, ບໍ່ແມ່ນປະຊາຊົນຊາວຢິວທັງໝົດ. ໃນສະພາບການເຫຼົ່ານັ້ນ, ບາງຄຳແປເພີ່ມ "ພວກຜູ້ນຳຂອງ" ເພື່ອເຮັດໃຫ້ຈະແຈ້ງຂຶ້ນ.

## ຢູດາ

### ຂໍ້ເທັດຈິງ

ຢູດາເປັນໜຶ່ງໃນລູກຊາຍຂອງຢາໂຄບ. ແມ່ຂອງລາວຄືນາງເລອາ. ລູກຫລານຂອງລາວຖືກເອີ້ນວ່າ " ເຜົ່າຢູດາ"

- ຢູດາເປັນຄົນທີ່ບອກໃຫ້ອ້າຍຂອງຕົນໃຫ້ຂາຍນ້ອງຊາຍທີ່ຊື່ໂຢເຊັບເປັນຂ້າທາດແທ່ນທີ່ຈະປ່ອຍໃຫ້ລາວຕາຍໃນນ້ຳ.
- ກະສັດດາວິດແລະກະສັດຕ່າງໆມາທັງໝົດເປັນເຊື້ອສາຍຂອງ ຢູດາ.ພຣະເຢຊູຄຣິດເຈົ້າກໍຄືກັນພຣະອົງເປັນເຊື້ອສາຍຂອງຢູດາ.
- ເມື່ອການຄອບຂອງໂຊໂລໂມນໄດ້ສິ້ນສຸດລົງແລະຊົນຊາດອິດສະຣາເອນໄດ້ຖືກແບ່ງແຍກອອກ, ອານາຈັກຢູດາເປັນພາກໃຕ້ຂອງປະເທດ.
- ໃນພຣະທຳພຣະນິມິດໃນພຣະຄຳພີໃໝ່, ພຣະເຢຊູໄດ້ຖືກເອີ້ນວ່າ "ສິງແຫ່ງຢູດາ."
- ຄຳທີ່ວ່າ "ຢິວ" ແລະ "ຢູດາຍ"ມາຈາກຊື່ "ຢູດາ."

## ຢູດາ,ອານາຈັກຢູດາ

### ຂໍ້ເທັດຈິງ

ເຜົ່າຢູດາເປັນເຜົ່າທີ່ໃຫຍ່ທີ່ສຸດໃນທ່າມກາງສິບສອງເຜົ່າຂອງອິດສະລາເອນ ອານາຈັກຢູດາໄດ້ຖືກແບ່ງອອກເປັນຢູດາແລະເບັນຈາມິນ.

- ຫຼັງຈາກທີ່ກະສັດໂຊໂລໂມນສະຫວັນນະຄົດ ປະເທດອິດສະລາເອນຖືກແບ່ງອອກເປັນສອງອານາຈັກຄື ອິດສະລາເອນຢູດາແລະອານາຈັກຢູດາເປັນອານາຈັກທາງຕອນໃຕ້ຕັ້ງຢູ່ທາງຕາເວັນອອກຂອງທະເລເກືອ.
- ເມືອງຫຼວງຂອງອານາຈັກຢູດາຄືກຸງເຢລູຊາເລັມ.
- ກະສັດເຈັດພຣະອົງຂອງອານາຈັກຢູດາເຊື່ອຟັງພຣະເຈົ້າແລະນຳປະຊາກອນນະມັດສະການພຣະອົງ ແຕ່ມີກະສັດຫຼາຍອົງຂອງຢູດາທີ່ທຳຊົ່ວຮ້າຍແລະໄດ້ນຳປະຊາຊົນໄປນະມັດສະການຮູບເຄົາລົບ.
- ຫຼາຍກ່ວາ120 ປີຫຼັງຈາກອານາຊີເຣັຽໄດ້ປາບປາມອິດສະລາເອນ (ອານາຈັກຕອນເໜືອ) ຢູດາຖືກພິຊິດໂດຍຊົນຊາດບາບີໂລນ ຊາວບາບີໂລນໄດ້ທຳລາຍເມືອງແລະພຣະວິຫານ ແລະນຳຄົນສ່ວນໃຫຍ່ຈາກອານາຈັກຢູດາໄປເປັນຊະເລີຍທີ່ບາບີໂລນ.

## ຢູດາ ອີສະກາຣີອົດ

### ຂໍ້ເທັດຈິງ

ຢູດາ ອີສະກາຣີອົດ ເປັນໜຶ່ງໃນອັກຄະສາວົກຂອງພຣະເຢຊູຄຣິດເຈົ້າ. ລາວເປັນຜູ້ທີ່ທໍລະຍົດພຣະເຢຊູຄຣິດເຈົ້າຮ່ວມກັບພວກຜູ້ນຳຊາວຢິວ.

- ຊື່ "ອີສະກາຣີອົດ" ອາດໝາຍຄວາມວ່າ "ຈາກເກຣີອົດ," ບາງເທື່ອອາດສະແດງໃຫ້ເຫັນວ່າຢູດາເຕີບໃຫຍ່ຂຶ້ນໃນເມືອງນັ້ນ.
- ຢູດາອີສະກາຣີອົດເປັນຜູ້ບໍລິຫານເງິນຂອງພວກອັກຄະສາວົກແລະໄດ້ລັກເອົາເງິນຈຳນວນໜຶ່ງເພື່ອໃຊ້ສ່ຳຫຼັບຕົວເອງ.
- ຢູດາທໍລະຍົດພຣະເຢຊູຄຣິດເຈົ້າໂດຍການບອກພວກຜູ້ນຳສາສະໜາວ່າພຣະເຢຊູຄຣິດເຈົ້າຢູ່ບ່ອນໃດເພື່ອພວກເຂົາຈະຈັບພຣະອົງ.
- ຫຼັງຈາກພວກຫົວໜ້າສາສະໜາໄດ້ຕັດສິນໂທດພຣະເຢຊູຄຣິດເຈົ້າໃຫ້ຕາຍ, ຢູດາຮູ້ສຶກເສຍໃຈທີ່ໄດ້ທໍລະຍົດພຣະເຢຊູຄຣິດເຈົ້າ, ສະນັ້ນລາວຈຶ່ງໄດ້ມອບເງິນທີ່ທໍລະຍົດຄືນໃຫ້ຜູ້ນຳຊາວຢິວ. ແລະລາວກໍໄດ້ຂ້າຕົວເອງຕາຍ.
- ອັກຄະສາວົກອີກຄົນໜຶ່ງຊື່ວ່າຢູດາຄືກັນ ຄົນໜຶ່ງຄືນ້ອງຊາຍຂອງພຣະເຢຊູຄຣິດເຈົ້າ, ມີຊາຍອີກຄົນໜຶ່ງຊື່ວ່າຢູດາໃນພຣະຄຳພີ, ເຊັ່ນນ້ອງຊາຍຂອງພຣະເຢຊູແລະອັກຄະສາວົກຄົນອື່ນໆ. ນ້ອງຊາຍຂອງພຣະເຢຊູຍັງມີຊື່ວ່າ "ຢູດາ."

## ຢູດາຍ

### ຂໍ້ເທັດຈິງ

ຄຳວ່າ "ຢູດາຍ" ໝາຍເຖິງທີ່ດິນໃນປະເທດອິດສະຣາເອນບູຮານ.
ບາງເທື່ອໃຊ້ໃນຄວາມໝາຍທີ່ແຄບແລະບາງເທື່ອກໍໃຊ້ໃນຄວາມໝາຍກວ້າງ.

- ບາງເທື່ອ "ຢູດາຍ"
  ໃຊ້ໃນຄວາມໝາຍທີ່ແຄບເພື່ອອ້າງເຖິງທີ່ຕັ້ງທີ່ຢູ່ທາງທິດໃຕ້ຂອງອິດສະຣາເອນບູຮານທາງທິດຕາເວັນຕົກຂອງທະເລຕາຍ.
  ຄຳແປບາງພາສາເອີ້ນແຂວງນີ້ວ່າ "ຢູດາຍ."


generated on Thu Jul 10 08:45:04 2025

- ຊ່ວງເວລາອື່ນໆ “ຢູດາຍ“ ມີຄວາມໝາຍກວ້າງແລະອ້າງອີງເຖິງທຸກໆແຂວງຂອງອິດສະຣາເອນໃນສະໄໝບູຮານ, ລວມທັ້ງແຂວງຄາລີເລ, ສະມາເຣຍ,ເປເຣຍ, ໄອດູເມຍແລະຢູດາຍ (ຢູດາ).
- ຖ້າຜູ້ແປຕ້ອງການເຮັດໃຫ້ເຫັນຄວາມແຕກຕ່າງມີຄວາມໝາຍຈະແຈ້ງຂຶ້ນ, ຄວາມໝາຍທີ່ກວ້າງຂອງແຂວງຢູດາຍ (ເຊັ່ນໃນ ລູກາ 1:5) ສາມາດແປເປັນ “ປະເທດຢູດາຍ” ແລະຄວາມໝາຍທີ່ແຄບ (ເຊັ່ນໃນ ລູກາ1:39) ສາມາດແປເປັນ “ແຂວງຢູດາຍ“ ຫລື “ແຂວງຢູດາ“ ເນື່ອງຈາກວ່ານີ້ເປັນສ່ວນໜຶ່ງຂອງແຜ່ນດິນອິດສະຣາເອນບູຮານທີ່ຊົນເຜົ່າຢິວເຄີຍອາໄສຢູ່.

## ຢູດາລູກຊາຍຂອງຢາໂກໂບ

### ຂໍ້ເທັດຈິງ

ຢູດາ, ລູກຊາຍຂອງຢາໂກໂບ, ເປັນໜຶ່ງໃນສາວົກສິບສອງຄົນຂອງພຣະເຢຊູ. ໃຫ້ສັງເກດວ່າຢູດາຄົນນີ້ບໍ່ຄົນດຽວກັນກັບຢູດາອີສະກາຣີອົດ.

- ໂດຍປົກກະຕິແລ້ວໃນພຣະຄຳພີ, ຜູ້ຊາຍທີ່ມີຊື່ດຽວກັນຖືກຈຳແນກໂດຍກ່າວເຖິງວ່າພວກເຂົາເປັນລູກຊາຍຄົນໃດ. ທີ່ນີ້, ຢູດາຖືກລະບຸວ່າເປັນ “ລູກຊາຍຂອງຢາໂກໂບ.“
- ຊາຍອີກຄົນໜຶ່ງຊື່ຢູດາເປັນນ້ອງຊາຍຂອງພຣະເຢຊູ. ແລະລາວຍັງຖືກເອີ້ນວ່າ“ຢູເດ.“
- ພຣະຄຳພີໃໝ່ເອີ້ນວ່າ “ຢູດາ“ ອາດຈະຖືກຂຽນໂດຍຢູດານ້ອງຊາຍຂອງພຣະເຢຊູຄຣິດເຈົ້າ, ເພາະລາວໄດ້ລະບຸຕົວເອງວ່າເປັນ “ນ້ອງຊາຍຂອງຢາໂກໂບ.“ ຢາໂກໂບເປັນນ້ອງຊາຍອີກຄົນໜຶ່ງຂອງພຣະເຢຊູຄຣິດເຈົ້າ.
- ອາດເປັນໄປໄດ້ວ່າພຣະທຳຢູດານັ້ນຖືກຂຽນໂດຍສາວົກຂອງພຣະເຢຊູຄຣິດເຈົ້າ, ຄືຢູດາລູກຊາຍຂອງຢາໂກໂບ.

## ຢົບປາ

### ຂໍ້ເທັດຈິງ

ໃນສະໄໝທີ່ຂຽນພຣະຄຳພີ, ເມືອງຢົບປາເປັນເຂດທະເລທີ່ສຳຄັນທາງການຄ້າຕັ້ງຢູ່ເທິງທະເລເມດິເຕຣາເນ, ທາງທິດໃຕ້ຂອງຫົ້ງພຽງຊາຣອນ.

- ໃນສະຖານທີ່ບູຮານຂອງເມືອງຢົບປາ, ປັດຈຸບັນເປັນເມືອງຢັບຟາເຊິ່ງເປັນສ່ວນໜຶ່ງຂອງເມືອງເທນອາວີບ.
- ໃນພຣະຄຳພີເດີມເມືອງຢົບປາເປັນເມືອງທີ່ໂຢນາຂີ້ເຮືອໄປເມືອງຕາກຊິດ
- ໃນພຣະຄຳພີໃໝ່, ແມ່ຍິງຄຣິສະຕຽນທີ່ຊື່ຕາບີທາໄດ້ເສຍຊີວິດທີ່ເມືອງຢົບປາແລະເປໂຕໄດ້ນຳໃຫ້ນາງກັບຄືນມາມີຊີວິດອີກ.

## ຢຽບຢ່ຳ

### ນິຍາມ

"ຢຽບຢ່ຳ" ໝາຍເຖິງການກ້າວໄປເຖິງບາງຢ່າງແລະບົດດ້ວຍຕີນສອງຂ້າງ. ຄຳນີ້ໃຊ້ໃຫ້ເຫັນພາບໃນພຣະຄຳພີເພື່ອໝາຍເຖິງ "ການທຳລາຍ" ຫລື "ປາບປາມ" ຫລື "ຈີກໜ້າ."

- ຕົວຢ່າງຂອງການ "ຢຽບຢ່ຳ" ຈະເປັນຢ່າງເຊັ່ນຄົນກຸ່ມໃຫຍ່ທີ່ແລ່ນຜ່ານຫົ້ງຫຍ້າຈະ "ຢຽບຢ່ຳ" ຫຍ້າໃນທຸ່ງນາດ້ວຍຕີນຂອງພວກເຂົາ.
- ໃນສະໄໝບູຮານ ເຫລົ້າອະງຸ່ນເຮັດໄດ້ໂດຍການຢຽບຢ່ຳໝັນອະງຸ່ນເພື່ອເອົານ້ຳຫມາກໄມ້ອອກມາ.
- ບາງເທື່ອຄຳວ່າ "ຫຢຽບຢ່ຳ" ໃຊ້ໃຫ້ເຫັນພາບຄວາມຫມາຍຂອງການລົງໂທດຜູ້ອື່ນໂດຍການຫຢຽບຢ່ຳ, ຢຽບຫຽບກັບການຢຽບຢ່ຳໂຄນເພື່ອເຮັດລາບນວດເຂົ້າ.
- ຄຳວ່າ "ຢຽບຢ່ຳ" ໃຊ້ເພື່ອໃຫ້ເຫັນພາບເພື່ອສະແດງວ່າພຣະຢາເວຈະຊົ່ງລົງໂທດປະຊາຊົນຂອງພຣະອົງສຳລັບຄວາມຍືງຍະໂສແລະການກະບົດຢ່າງໃດ.
- ວິທີອື່ນທີ "ການຢຽບຢ່ຳ" ຈະສາມາດແປໄດ້ລວມເຖິງ, "ບົດດ້ວຍຕີນ" ຫລືກະທືບດ້ວຍຕີນ" ຫລື "ຢຽບແລະບົດຂະຍີ" ຫລື "ເຮັດໃຫ້ປົນປີເທິງພື້ນ."
- ຂຶ້ນຢູ່ກັບບໍລິບົດ, ຄຳນີ້ສາມາດແປໂດຍບໍ່ຕ້ອງມີພາບປຽບເປັນຮູບຮ່າງເຊັ່ນ, "ທຳລາຍ" ຫລືປາບລົງ" ຫລື "ບົດຂະຍີ" ຫລື "ລົງໂທດ" ຫລື"ປາບລົງຢ່າງສິ້ນເຊີງ.

## ຢ່າງຕ່ຳຕ້ອຍ, ຄວາມຕ່ຳຕ້ອຍ

### ນິຍາມ

ຄຳວ່າ " ຢ່າງຕ່ຳຕ້ອຍ " ແລະ " ຄວາມຕ່ຳຕ້ອຍ " ໝາຍເຖິງການເປັນຄົນຈົນ ແລະ ມີຖານະທີ່ຕ່ຳຕ້ອຍ
ຄຳນີ້ສາມາດມີຄວາມໝາຍວ່າເປັນຄົນສາມັນ

- ພຣະເຢຊູຊົງໄດ້ຖ່ອມຕົວລົງເພື່ອມີຖານະຕ່ຳຕ້ອຍໃນການເປັນມະນຸດ ແລະ ຮັບໃຊ້ຜູ້ອື່ນ
- ການປະສູກຢ່າງຕ່ຳຕ້ອຍເພາະພຣະອົງປະສູດໃນສະຖານະທີ່ທີ່ເປັນຄອກສັດບໍ່ແມ່ນໃນລາດສະວັງ
- ການມີທັກສະນະຄະຕີທີ່ຕ່ຳຕ້ອຍນັ້ນກົງກັນຂ້າມກັບການເປັນຄົນຍິ່ງ
- ວິທີແປຄຳວ່າ " ຢ່າງຕ່ຳຕ້ອຍ " ສາມາດລວມເຖິງ " ຖ່ອມໃຈ " ຫຼື " ຂອງສະຖານະທີ່ຕ່ຳ " ຫຼື " ບໍ່ສຳຄັນ"
- ຄຳວ່າ " ຄວາມຕ່ຳຕ້ອຍ " ສາມາດແປວ່າ " ຄວາມຖ່ອມ " ຫຼື " ມີຄວາມສຳຄັນນ້ອຍ "

## ຮັຍບຍາ

### ຂໍ້ເທັດຈິງ

ຮັຍບຍາ ເປັນເມືອງທີ່ສຳຄັນທີ່ສຸດຂອງຊາວອໍາໂມນ.

- ໃນການຕໍ່ສູ້ກັບຊາວອໍາໂມນ, ຊາວອິສະຣາເອນໄດ້ໂຈມຕີເມືອງຮັຍບຍາຢູ່ຫຼາຍເທື່ອ.
- ກະສັດຂອງຊາວອິສະຣາເອນ ຄືກະສັດດາວິດໄດ້ຍຶດຄອງເມືອງຮັຍບຍາເຊິ່ງເປັນນຶ່ງໃນເມືອງສຸດທ້າຍທີ່ພຣະອົງຍຶດຄອງໄດ້.
- ເມືອງອໍາມາບຈໍແດນໃນປັດຈຸບັນນີ້ເຄີຍເປັນທີ່ຕັ້ງຂອງເມືອງຮັຍບຍາໃນອະດີດ.

## ຮັຍບີ, ຄຣູຫຼືອາຈານ

### ນິຍາມ

ຄຳວ່າ"ຮັຍບີ"ຕາມໂຕໜັງສືມີຄວາມໝາຍວ່າ"ເຈົ້ານາຍຂອງຂ້າພຣະເຈົ້າ"ຫຼື"ຄຣູຂອງຂ້າພຣະເຈົ້າ."

- ເປັນຕຳແໜ່ງທີ່ສະແດງຄວາມນັບຖືທີ່ໃຊ້ເອີ້ນຜູ້ຊາຍຊາວຢິວທີ່ເປັນຄຣູດ້ານສາດສະໜາ,ໂດຍສະເພາະຄຣູຜູ້ສອນພຣະບັນຍັດຂອງພຣະເຈົ້າ.
- ໂຢຮັນບັບຕິດສະໂຕຜູ້ໃຫ້ບັບຕິດສະມາແລະພຣະເຢຊູຄຣິດເຈົ້າທັ້ງສອງທ່ານນີ້ບາງຄັ້ງຖືກເອີ້ນວ່າ"ຮັບບີ"ໂດຍເຫຼົ່າສາວົກຂອງທ່ານທັ້ງສອງ.

### ຄຳແນະນຳໃນການແປ

- ວິທີແປຄຳນີ້ສາມາດລວມເອົາ,"ນາຍຂອງຂ້າພຣະເຈົ້າ"ຫຼື"ຄຣູຂອງຂ້າພຣະເຈົ້າ"ຫຼື"ຄຣູຜູ້ມີກຽດ"ຫຼື"ຄຣູດ້ານສາດສະໜາ." ບາງພາສາອາດຂຶ້ນຕົ້ນດ້ວຍໂຕໜັງສືໃຫຍ່ສຳລັບຄຳທັກທາຍເຊັ່ນນີ້ ໃນຂະນະທີ່ພາສາອື່ນບໍ່ມີ.
- ພາສາທີ່ແປອາດມີວິທີພິເສດທີ່ບັນດາຄຣູຈະມີວິທີເອີ້ນຊື່.
- ໃຫ້ໝັ້ນໃຈວ່າການແປຄຳນີ້ຈະບໍ່ເປັນຄືການເອີ້ນພຣະເຢຊູຄືການເອີ້ນຄຣູໃນໂຮງຮຽນ.
- ໃຫ້ພິຈາລະນາເບິ່ງວ່າ"ຮັຍບີ"ແປແນວໃດໃນພຣະຄັມພີໃນພາສາທ້ອງຖິ່ນໃນພາສາກາງ.

## ຣາມາ

### ຂໍ້ເທັດຈິງ

ຣາມາເປັນເມືອງບູຮານຂອງຊາວອິສະຣາເອນ ປະມານ 8 ກິໂລແມັດຈາກກຸງເຢຣູຊາເລັມ ເມືອງຣາມາຢູ່ໃນດິນທີ່ມີເຜົ່າເບັນຢາມິນໄດ້ອາໃສຢູ່.

- ເມືອງຣາມາແມ່ນເມືອງນຶ່ງຣາເຊັ່ນຕາຍຢູ່ຫ້ັນຫລັງຈາກໃຫ້ກຳເນີດເບັນຢາມິນແລ້ວ.
- ຕອນທີ່ຊົນຊາດອິສະຣາເອນຖືກກວດຕ້ອນໄປເປັນຊະເລີຍທີ່ບາບີໂລນພວກເຂົາຖືກນຳໄປທີ່ເມືອງຣາມາກ່ອນທີ່ຈະຍ້າຍໄປທີ່ເມືອງບາບີໂລນ.
- ຣາມາເປັນຖິ່ນກຳເນີດຂອງມານດາແລະຍິດາຊອງຊາມູເອນ.


generated on Thu Jul 10 08:45:04 2025

## ຣາຮາບ

### ຂ້ເທັດຈິງ

ຣາຮາບເປັນຜູ້ຍິງທີ່ອາໃສຢູ່ໃນເມືອງເຢຣິໂກເມື່ອຄົນອິສະຣາເອນໂຈມຕີເມືອງເຢຣິໂກ. ເຂົາເປັນຍິງໂສເພນີ.

- ຣາຮາບ ໄດ້ເຊື່ອງຄົນອິດສະຣາເອນສອງຄົນທີ່ມາສອດແນມເມືອງເຢຣິໂກກ່ອນທີ່ອິດສະຣາເອນຈະໂຈມຕີເມືອງນັ້ນ.
  ບາງຣາຮາບໄດ້ຊ່ອຍໃຫ້ຄົນອິສະຣາເອນສອງຄົນນີ້ໜີກັບໄປຄ້າຍຂອງອິສະຣາເອນ.
- ຣາຮາບໄດ້ກາຍເປັນຜູ້ເຊື່ອໃນພຣະຢາເວ.
- ເຂົາແລະຄອບຄົວຂອງເຂົາໄດ້ຮັບການໄວ້ຊີວິດເມື່ອເມືອງເຢຣິໂກຖືກມ້າງເພແລະພວກເຂົາທັງໝົດໄດ້ມາອາໃສຢູ່ກັບຊາວອິສະຣາເອນ.

## ຣາເຊັນ

### ຂ້ເທັດຈິງ

ຣາເຊັນເປັນນຶ່ງໃນບັນດາພັນລະຍາຂອງຢາໂຄບ.ເຂົາແລະເອື້ອຍຂອງເຂົາ ເລອາ ເປັນລູກສາວຂອງລາບານ,ເຊິ່ງເປັນລູງຂອງຢາໂຄບ.

- ຣາເຊັນເປັນແມ່ຂອງໂຢເຊັບແລະເບັນຢາມິນ,ເຊິ່ງລູກຫຼານຂອງພວກເຂົາກາຍມາເປັນສອງເຜົ່າໃນສິບສອງເຜົ່າຂອງຊົນຊາດອິສະຣາເອນ.
- ເປັນເວລາຫຼາຍປີ,ທີ່ຣາເຊັນບໍ່ສາມາດມີລູກໄດ້. ດ້ງນັ້ນພຣະເຈົ້າເຮັດໃຫ້ຣາເຊັນໃຫ້ກຳເນີດໂຢເຊັບ.
- ຫຼາຍປີຕໍ່ມາ,ຣາເຊັນເສຍຊີວິດຫຼັງຈາກໃຫ້ກຳເນີດເບັນຢາມິນ ແລະຢາໂຄບໄດ້ຝັ່ງເຂົາໃກ້ກັບເບັດເລເຮັມ.

## ຣາໂມດ

### ຂ້ເທັດຈິງ

ຣາໂມດ ເປັນເມືອງສຳຄັນເມືອງນຶ່ງທີ່ຢູ່ເທິງພູເຂົາກິເລອາດໃກ້ກັບແມ່ນ້ຳຈໍແດນ. ມັນຖືກເອີ້ນວ່າ ຣາໂມດກິເລອາດດ້ວຍ.

- ຣາໂມດເປັນເມືອງຂອງອິສະຣາເອນເຜົ່າກາດແລະໄດ້ຖືກອອກແບບໃຫ້ເປັນເມືອງລີ້ພັຍ.
- ກະສັດອາຮາບແຫ່ງອິສະຣາເອນແລະກະສັດເຢໂຮຊາຟັດແຫ່ງຢູດາໄດ້ຮ່ວມກັນຕໍ່ສູ້ກັບກະສັດແຫ່ງອາຣາມທີ່ເມືອງຣາໂມດ
  ກະສັດອາຮາບຖືກຂ້າຕາຍໃນສົງຄາມນັ້ນ.
- ເວລາຕໍ່ມາ, ກະສັດອາຮາດເຊຍແລະກາສັດໂຢຣາມໄດ້ພະຍາຍາມຊິງເອົາເມືອງຣາໂມດຈາກກະສັດແຫ່ງອາຣາມ.
- ຣາໂມດກິເລອາດເປັນທີ່ທີ່ເຢຮູຖືກເຈີມໃຫ້ເປັນກະສັດເໜືອອິສະຣາເອນ.

## ຣິດເດດ

### ນິຍາມ

ຄຳວ່າ ''ຣິດເດດ ''ໝາຍເຖິງຄວາມສາມາດໃນການເຮັດສິ່ງຕ່າງໆ ຫລື ເຮັດສິ່ງຕ່າງໆ ເກີດຂຶ້ນ,ຫລາຍເທື່ອມັກຈະໃຊ້ກຳລັງຫລາຍ ''ຣິດເດດ '' ໝາຍເຖິງຄົນຫລືວິນຍານທີ່ມີຄວາມສາມາດພິເສດຍິ່ງໃຫຍ່ທີ່ເຮັດໃຫ້ສິ່ງຕ່າງໆເກີດຂຶ້ນໄດ້.

- ຣິດເດດຂອງພຣະເຈົ້າ'' ອ້າງເຖິງຄວາມສາມາດຂອງພຣະເຈົ້າທີ່ຈະເຮັດທຸກສິ່ງທຸກຢ່າງ,
  ສະເພາະຢ່າງຍິ່ງສິ່ງທີ່ມະນຸດບໍ່ສາມາດເຮັດໄດ້.
- ພຣະເຈົ້າຊົງມີຣິດເດດເໜືອທຸກສິ່ງທີ່ພຣະເຈົ້າໄດ້ຊົງສ້າງ.
- ພຣະເຈົ້າປະທານຣິດເດດໃຫ້ແກ່ຄົນຂອງພຣະອົງເພື່ອເຮັດໃນສິ່ງທີ່ພຣະເຈົ້າປະສົງ, ເພື່ອວ່າເມື່ອພວກເຂົາຮັກສາຄົນ ຫລື
  ເຮັດສິ່ງອັດສະຈັນ, ພວກເຂົາເຮັດສິ່ງເຫລົ່ານີ້ດ້ວຍຣິດເດດຂອງພຣະເຈົ້າ.
- ເພາະວ່າພຣະເຢຊູແລະພຣະວິນຍານບໍຣິສຸດເປັນພຣະເຈົ້າ,ດ້ວຍເຊັ່ນກັນຈຶ່ງມີຣິດເດດນີ້ດ້ວຍ.

### ຄຳແນະນຳໃນການແປ

ສາມາດທີ່ຈະເຮັດການອັດສະຈັນ, ຫລື ''ບ້ງຄັບ''

- ເປັນໄປໄດ້ທີ່ຈະແປຄຳວ່າ ''ຣິດເດດ'' ສາມາດລວມເອົາ ''ຊີວິດທີ່ມີອຳນາດ'' ຫລື '' ວິນຍານທີ່ບ້ງຄັບ'' ຫລື
  ''ຄົນເຫລົ່ານັ້ນທີ່ຄວບຄຸມຄົນອື່ນ.''

- ຄຳກ່າວ ເຊັ່ນ ''ຂໍຊ່ວຍພວກເຮົາຈາກອຳນາດຂອງເຫລົ່າສັດຕູຂອງເຮົາ'' ສາມາດແປວ່າ ''ຂໍຊ່ວຍເຮົາຈາກການກົດຂີ່ໂດຍສັດຕູຂອງພວກເຮົາ'' ຫລື ''ຂໍຊ່ວຍເຮົາໃຫ້ລອດພົ້ນຈາກຖືກຄວບຄຸມໂດຍສັດຕູຂອງພວກເຮົາ'' ໃນກໍລະນີນີ້ ''ຣິດເດດ'' ມີຄວາມໝາຍໃນການໃຊ້ກຳລັງຂອງບາງຄົນຄວບຄຸມຫລືກົດຂີ່ຄົນອື່ນ.
- ຂຶ້ນຢູ່ກັບບໍ່ດບາດ ຄຳວ່າ ''ຣິດເດດ'' ສາມາດແປວ່າ ''ຄວາມສາມາດ'' ຫລື ''ຄວາມແຂງແຮງ'' ຫລື ''ພຣະລັງງານ'' ຫລື ''ຄວາມ

## ຣິມໂມນ

### ຂ້ເທັດຈິງ

ຣິມໂມນແມ່ນຊື່ຂອງຜູ້ຊາຍແລະຫຼາຍໆສະຖານທີ່ໆກ່າວເຖິງໃນ ພຣະຄັມພີ. ມັນຍັງແມ່ນຊື່ຂອງພຣະເຈົ້າປອມ.

- ຊາຍຄົນໜຶ່ງຊື່ວ່າຣິມໂມນເປັນຄົນເບັນຢາມິນຈາກເມືອງເບັດໂຢັດໃນເມືອງ ເສຂູລູນ. ພວກລູກຊາຍຂອງຊາຍຄົນນີ້ໄດ້ຂ້າ ອີໂຍເຊ, ລູກຊາຍທີ່ຖືກຂ້ຶງຂອງໂຍນາທານ.
- ເມືອງ ຣິມໂມນ ແມ່ນເມືອງໜຶ່ງໃນພາກໃຕ້ຂອງຢູດາ, ໃນພາກພື້ນທີ່ຄອບຄອງໂດຍຊົນເຜົ່າຂອງເບັນຢາມິນ.
- "ຫີນຂອງ ຣິນໂມນ" ແມ່ນສະຖານທີ່ປອດພັຍບ່ອນທີ່ຊາວເບັນ ຢາມິນໄດ້ໜີຈາກການຖືກຂ້າຕາຍໃນການສູ້ຮົບ.
- ຣິນໂມນ-ເປເລດ ແມ່ນສະຖານທີ່ທີ່ບໍ່ຮູ້ຈັກໃນຖືນແຫ້ງແລ້ງກັນດານຢູເດຍ.
- ຫ່ານບາມານຜູ້ບັນຊາການຊາວຊີເຣຍກ່າວເຖິງວິຫານຂອງພຣະເຈົ້າ ຣິນໂມນທີ່ບໍ່ຖືກຕ້ອງ, ບ່ອນທີ່ກະສັດແຫ່ງປະເທດຊີເຣຍເຄົາລົບບູຊາ.

## ຣຸດ

### ຂ້ເທັດຈິງ

ຣຸດເປັນຜູ້ຍິງຊາວໂມໄຍ
ທີ່ໄດ້ແຕ່ງງານກັບຜູ້ຊາຍອິສະຣາເອນແລ້ວໄດ້ຍ້າຍໄປຍັງໂມອາບພ້ອມດ້ວຍຄອບຄົວຂອງເຂົາໃນລະຍະເວລາທີ່ເຫຼົ່າຜູ້ວິນິດໃສນຳອິສະຣາເອນ.

- ສາມີຂອງ ຣຸດ
  ໄດ້ຕາຍແລະໃນຕອນຫຼັງຈາກນັ້ນນາງໄດ້ຈາກໂມອາບເພື່ອເດີນທາງໄປກັບນາງນາໂອມີແມ່ສາມີຂອງນາງຜູ້ທີ່ກັບໄປຍັງເບັດເລເຮັມ ອິສະຣາເອນບ້ານເກີດຂອງນາງ.
- ຣຸດ ຊື່ສັດຕໍ່ນາໂອມີແລະຫໍ່ໆງານໜັກເພື່ອຈັດຫາອາຫານໃຫ້ນາງ.
- ນາງຍັງອຸທິດຕົວເອງວ່າຈະຮັບໃຊ້ພຣະເຈົ້າທີ່ຫ່ຽງແທ້ຂອງອິສະຣາເອນ.
- ຣຸດ ໄດ້ແຕ່ງງານກັບຊາວອິສະຣາເອນຊື່
  ໂບອາດແລະໃຫ້ກຳເນີດບຸດຊາຍຄົນນຶ່ງຜູ້ຊຶ່ງໄດ້ກາຍມາເປັນປູ່ຂອງກະສັດດາວິດແລະບັນພະບຸລຸດຂອງພຣະເຢຊູຄຣິດ.

## ຣູເບັນ

### ຂ້ເທັດຈິງ

ຣູເບັນ ແມ່ນລູກຊາຍກົກຂອງຢາໂຄບ. ແມ່ຂອງລາວຊື່ວ່າເລອາ.

- ເມື່ອພວກອ້າຍຂອງລາວວາງແຜນທີ່ຈະຂ້ານ້ອງຊາຍຂອງພວກເຂົາໂຢເຊັບ, ນາງ ຣູເບັນ ໄດ້ເອົາຊີວິດຂອງໂຢເຊັບໂດຍບອກໃຫ້ພວກເຂົາເອົາລາວເຂົ້າໄປໃນຂຸມອີກ.
- ຕໍ່ມາຣູເບນໄດ້ກັບມາຊ່ອຍໂຢເຊັບ, ແຕ່ອ້າຍນ້ອງອື່ນໆໄດ້ຂາຍລາວໃຫ້ເປັນທາດໃຫ້ແກ່ພໍ່ຄ້າທີ່ ກຳ ລັງຜ່ານໄປ.
- ເຊື້ອສາຍຂອງ ຣູເບັນ ໄດ້ກາຍເປັນ ໜຶ່ງ ໃນສິບສອງເຜົ່າຂອງອິສະຣາເອນ.

## ລອບຄອບ

### ນິຍາມ

ຄຳວ່າ "ລອບຄອບ "ອະທິບາຍເຖິງບຸກຄົນຄົນທີ່ຄິດຢ່າງຣະມັດຣະວັງກ່ຽວກັບການກະທຳຂອງຕ່ານແລະຕັດສິນໃຈຢ່າງສະຫລາດ

- ຫລາຍເທື່ອຄຳວ່າ "ລອບຄອບ"
  ອ້າງເຖິງຄວາມສາມາດໃນການຕັດສິນໃຈທີ່ຊານສະຫລາດກ່ຽວກັບສິ່ງທີ່ໃຊ້ໄດ້ຈິງໃນສະຖານະການຫາງຮ່າງກາຍເຊັ່ນການຈັດການເລື່ອງເງິນຫລືເລື່ອງຊ
- ເຖິງວ່າ "ລອບຄອບ" ແລະ "ສະຕິປັນຍາ" ນັ້ນຈະມີຄວາມຫມາຍຄ້າຍກັນ ຫລາຍເທື່ອກັບຄຳວ່າ "ສະຕິປັນຍາ" ຈະເປັນເລື່ອງທົ່ວໄປຫລາຍກວ່າແລະເນັ້ນເລື່ອງຈິດວິນຍານຫລືເລື່ອງສິນລະທຳ


generated on Thu Jul 10 08:45:04 2025

- ຂຶ້ນຢູ່ກັບປະໂຫຍກທີ່ໃຊ້ ຄໍາວ່າ"ລອບຄອບ"ອາດແປໄດ້ວ່າ "ຫຼັກແຫຼມ" ຫລື "ຣະມັດຣະວັງ" ຫລື "ສະຫລາດ"

## ລະງັບງຽບ

### ນິຍາມ

ຄໍາວ່າ " ດັບ" ເຊິ່ງ ຫຼື ຢຸດບາງຢ່າງທີ່ເຫັນວ່າເຣົ້າພໍໃຈກັບສິ່ງນັ້ນ.

- ຄໍາວ່າ ດັບມັກໃຊ້ໃນການຫິວນ້ໍາແລະຄວາມໝາຍວ່າເຊິ່ງການຫິວໂດຍການດື່ມບາງຢ່າງ.
- ຄໍາວ່າດັບກໍສາມາດໃຊ້ໄດ້ໃນຫ້າມດັບໄຟ.
- ຫ້ງສອງຢ່າງຫິວກະຫາຍຫຼືໄຟຈະດັບດ້ວຍນ້ໍາ
- ໂປໂລໃຊ້ຄໍາວ່າ " ດັບ" ເປັນການປຽບທຽບເມື່ອທ່ານສອນຜູ້ທີ່ເຊື່ອທ້ງຫຼາຍບໍ່ໃຫ້ດັບພ ຣະວິນຍານບໍຣິສຸດຊຶ່ງໝາຍເຖິງບໍ່ໃຫ້ທ້ໃຈຈາກການຍອມໃຫ້ພຣະວິນຍານເກີດຜົນແລະຂອງປະທານໃນຊີວິດຂອງພວກເຂົາ ດັບໝາຍເຖິງເຣັດບາງຢ່າງທີ່ຂັດກັບ ພຣະວິນຍານບໍຣິສຸດຂອງການທໍາງານໄດ້ແລະທໍາງານຜ່ານບຸກຄົນ.

## ລະຖິ້ມ, ຖືກປະຖິ້ມ

### ນິຍາມ

ຄໍາວ່າ "ລະຖິ້ມ" ໝາຍເຖິງການປະຖິ້ມບາງຄົນຫຼືຍອມແພ້ບາງສິ່ງບາງຄົນທີ່ຖືກ "ປະຖິ້ມ" ໄດ້ເຄີຍຖືກລະຖິ້ມໂດຍບາງຄົນ.

- ເມື່ອມະນຸດ "ປະຖິ້ມ" ພຣະເຈົ້ານັ້ນໝາຍຄວາມວ່າພວກເຂົາເປັນຄົນທີ່ບໍ່ສັດຊື່ຕໍ່ພຣະອົງໂດຍການບໍ່ເຊື່ອຟັງພຣະອົງ.
- ເມື່ອພຣະເຈົ້າ "ປະຖິ້ມ" ມະນຸດນັ້ນ,ໝາຍຄວາມວ່າພຣະອົງໄດ້ຢຸດການຊ່ວຍເຫຼືອພວກເຂົາແລະປ່ອຍໃຫ້ພວກເຂົາມີປະສົບການທີ່ຍາກລໍາບາກ ເພື່ອທີ່ຈະທໍາໃຫ້ພວກເຂົາຫັນກັບມາຫາພຣະອົງ.
- ຄໍານີ້ສາມາດໝາຍເຖິງການປະຖິ້ມສິ່ງຂອງ, ເຊັ່ນການປະຖິ້ມຫຼືບໍ່ຕິດຕາມຄໍາສອນຂອງພຣະເຈົ້າ.
- ຄໍາວ່າ "ປະຖິ້ມ"ສາມາດໃຊ້ໃນຮູບແບບອະດີດຕະການເໝືອນໃນປະໂຫຍກທີ່ວ່າ "ເຂົາໄດ້ປະຖິ້ມທ່ານ" ຫຼື ເພື່ອບົ່ງບອກເຖິງບາງຄົນທີ່ໄດ້ "ຖືກປະຖິ້ມ".

### ຄໍາແນະນໍາການແປ

- ອີກແນວທາງທີ່ແປຄໍານີ້ສາມາດລວມທ້ງຄໍາວ່າ, "ປະຖິ້ມ" ຫຼື "ລະເລີຍ" ຫຼື "ຍອມແພ້" ຫຼື "ຈາກໄປ" ຫຼື "ຖິ້ມໄວ້ຂ້າງຫຼັງ" ຂຶ້ນຢູ່ກັບບໍຣິບົດນັ້ນ ໆ.
- ທີ່ຈະ "ລະຖິ້ມ" ທ້ມະບັນຍັດຂອງພຣະເຈົ້າສາມາດແປໄດ້ອີກວ່າ "ບໍ່ເຊື່ອຟັງທ້ມະບັນຍັດຂອງພຣະເຈົ້າ," ຄໍານີ້ສາມາດແປໄດ້ອີກວ່າ "ປະຖິ້ມ" ຫຼື"ຍອມແພ້ເທ່ິງ" ຫຼື "ຢຸດການເຊື່ອຟັງ" ການສອນຂອງພຣະອົງຫຼືທ້ມະບັນຍັດຂອງພຣະອົງ.
- ປະໂຫຍກທີ່ວ່າ "ຖືກລະຖິ້ມ" ສາມາດແປໄດ້ອີກວ່າ "ຖືກຖອດຖິ້ມ "ຫຼື"ຖືກປະຣ້າງ".
- ຄໍາໃນພາສາທ່ີແປອາດຈະຊັດແຈ້ງຫຼາຍກ່ວາ ຫາກໃຊ້ຄໍາທ່ີແຕກຕ່າງໃນການແປຄໍານ,ຶ ຂຶ້ນຢູ່ກັບວ່າໃນຂໍ້ນັ້ນກໍາລັງເວົ້າເຖິງການປະຖິ້ມແບບໃດ ສິ່ງຂອງຫຼືຄົນ.

## ລະເມີດ,ການລ່ວງລະເມີດ

### ນິຍາມ

ຄໍາວ່າ "ລະເມີດ" ແລະ "ການລ່ວງລະເມີດ" ໝາຍເຖິງການບໍ່ປະຕິບັດຕາມຄໍາສ່ັງ, ກົດຫມາຍ, ຫລືຫລັກສິນລະທໍາ.

- ຕາມການປຽບທຽບ, "ການລ່ວງລະເມີດ" ອາດກ່າວໄດ້ວ່າເປັນ "ຂ້າມເສັ້ນ," ນັ້ນຄືໄປຫລາຍກວ່າຂີດຈໍາກັດ ຫລືຂອບເຂດທ່ີກໍານົດໄວ້ເພ່ືອສ່ິງດີຂອງບຸກຄົນແລະບຸກຄົນອ່ືນ.
- ຄໍາວ່າ "ລະເມີດ," "ບາບ," "ຄວາມຊ້ົວຊ້ໍ," ແລະ "ລ່ວງລະເມີດ" ທ້ງໝົດນ່ີມີຄວາມຫມາຍເຖິງການສະແດງອອກເຖິງການບໍ່ເຊື່ອຟັງຕໍ່ນ້ໍາພຣະໄທຂອງພຣະເຈົ້າແລະບໍ່ເຊື່ອຟັງຄໍາສ່ັງຂອງພຣະອົງ.

### ຄໍາແນະນໍາໃນການແປ

- "ການລະເມີດ" ສາມາດແປວ່າ "ບາບ" ຫລື "ບໍ່ເຊື່ອຟັງ" ຫລື "ກະບົດ."


generated on Thu Jul 10 08:45:04 2025

- ຫາກຂໍ້ຫລືຂໍ້ຄວາມໃຊ້ຄໍາສອງຄໍາເຊິ່ງແປວ່າ "ບາບ" ຫລື "ລະເມີດ" ຫລື "ລ່ວງເກີນ," ສິ່ງສໍາຄັນຫລາຍ, ໃຫ້ໃຊ້ວິທີຕ່າງໆໃນການແປຄໍາເຫລົ່ານີ. ເມື່ອພຣະຄໍາພີໃຊ້ຄໍາສອງຄໍາຂຶ້ນໄປທີ່ມີຄວາມໝາຍຄ້າຍຄືກັນໃນບໍລິບົດດຽວກັນ, ປົກກະຕິມັກມີຈຸດປະສົງເພື່ອເນັ້ນຢ້ໍາເຖິງສິ່ງທີ່ກໍາລັງຖືກເວົ້າເຖິງຫລືສະແດງຄວາມສໍາຄັນຂອງເລື່ອງນັ້ນ.

## ລະເມີດ

### ນິຍາມ

ການ "ລະເມີດ" ໝາຍເຖິງການຝ່າຝືນກົດຫມາຍຫລືການລະເມີດສິດທິຂອງບຸກຄົນອື່ນ.

- ການລະເມີດ ສາມາດເປັນການຝ່າຝືນຈາລີຍະທໍາຫລືກົດຫມາຍແຜ່ງຫລືຄວາມບາບທີ່ກະທໍາຕໍ່ບຸກຄົນອື່ນ.
- ຄໍານີ້ກ່ຽວຂ້ອງກັບຄໍາວ່າ "ບາບ," ແລະ "ລະເມີດ," ໂດຍສະເພາະຢ່າງຍິ່ງກ່ຽວຂ້ອງກັບການບໍ່ເຊື່ອຟັງພຣະເຈົ້າ.
- ບາບທຸກຢ່າງລະເມີດຕໍ່ພຣະເຈົ້າ.

### ຄໍາແນະນໍາໃນການແປ

- ຂຶ້ນຢູ່ກັບບໍລິບົດ, "ລະເມີດ" ສາມາດແປວ່າ "ບາບຕໍ່" ຫລື "ເພື່ອທໍາລາຍກົດ."
- ບາງພາສາອາດມີຄໍາກ່າວເຊັ່ນ "ຂ້າມເສັ້ນ" ທີ່ສາມາດໃຊ້ແປວ່າ "ການລະເມີດ" ໄດ້.
- ພິຈາລະນາວ່າຄໍານີ້ເໝາະສົມກັບຄວາມໝາຍຂອງຂໍ້ຄວາມພຣະຄໍາພີ ແລະປຽບທຽບກັບຄໍາອື່ນທີ່ມີຄວາມຫມາຍຄ້າຍກັນເຊັ່ນ, "ລະເມີດ" ແລະ "ບາບ."

## ລັດທິຢູດາຍ, ສາສະໜາຢິວ

### ນິຍາມ

ຄໍາວ່າ “ລັດທິຢູດາຍ“ ໝາຍເຖິງສາສະໜາທີ່ຊາວຢິວປະຕິບັດ. ແລະຍັງຖືກເອີ້ນວ່າ “ສາສະໜາຢິວ“

- ໃນພຣະຄໍາພີເດີມ, ນໍາໃຊ້ຄໍາວ່າ “ສາສະໜາຢິວ“ , ໃນຂະນະທີ່ຢູ່ໃນພຣະຄໍາພີໃໝ່ນໍາໃຊ້ຄໍາວ່າ “ລັດທິຢິວ.“
- ລັດທິຢູດາຍ
  ລວມທັ້ງທຸກໆກົດບັນຍັດໃນພຣະຄໍາພີເດີມແລະຄໍາແນະນໍາຕ່າງໆທີ່ພຣະເຈົ້າໄດ້ມອບໃຫ້ຊາວອິດສະຣາເອນໃຫ້ປະຕິບັດຕາມ. ແລະຍັງລວມທັ້ງຮີດຄອງປະເພນີທີ່ໄດ້ຖືກເພີ່ມເຂົ້າໃນສາສະໜາຢິວໃນແຕ່ລະໄລຍະ.
- ເມື່ອແປ, ຄໍາວ່າ “ສາສະໜາຢິວ“ ຫລື “ສາສະໜາຂອງຊາວຢິວ“ ສາມາດນໍາໃຊ້ທັ້ງໃນພຣະຄໍາພີເດີມແລະໃນພຣະຄໍາພີໃໝ່.
- ເຖິງຢ່າງໃດກໍຕາມ, ຄໍາວ່າ “ຢູດາຍ“ ຄວນຈະຖືກນໍາໃຊ້ໃນພຣະຄໍາພີໃໝ່ເທົ່ານັ້ນ, ຍ້ອນວ່າຄໍາສັບນັ້ນບໍ່ເຄີຍມີຢູ່ກ່ອນເວລານັ້ນ.

## ລາ ລໍ

### ນິຍາມ

ລາເປັນສັດໃຊ້ງານ ມີສີຂາ ຄ້າຍກັບມ້າ ແຕ່ມີຂະຫນາດນ້ອຍ ກ່ວາ ແລະມີຫູຍາວກ່ວາ.

- ລໍເປັນລູກທີ່ເກີດ ຈາກການປະສົມພັນ ລະຫວ່າງ ລາຕົວຜູ້ແລະມ້າຕົວເມຍ.
- ລໍເປັນສັດທີ່ແຂງແຮງ ຫລາຍ ແລະເປັນສັດໃຊ້ງານທີ່ມີຄ່າຫລາຍ.
- ທັ້ງລາແລະລໍ ໃຊ້ເພື່ອບັນທຸກສິ່ງຂອງແລະຄົນ ໃນການເດີນທາງ .
- ໃນສະໄຫມ ພຣະຄັມພີ ກະສັດຂີລາ ໃນຍາມສະຫງົບສຸກ ແລະຂີ່ມ້າໃນເວລາສົງຄາມ..
- ພຣະເຢຊູ ຂີ່ລາຫ່ນຸ່ມ ເຂົ້າໄປໃນກຸງເຢຣູຊາເລັ້ມ ຫນຶ່ງອາທິດ

ກ່ອນທີ ພຣະອົງຈະຖືກຄຶງທີ່ໄມ້ກາງແຂນ.


generated on Thu Jul 10 08:45:04 2025

## ລາງວັນ

### ນິຍາມ

ຄໍາວ່າ“ ລາງວັນ” ໝາຍເຖິງສິ່ງທີ່ຄົນເຮົາໄດ້ຮັບຍ້ອນສິ່ງທີ່ລາວໄດ້ເຮັດ, ບໍ່ວ່າຈະເປັນສິ່ງທີ່ດີຫຼືບໍ່ດີ. "ໃຫ້ລາງວັນ"
ຜູ້ໃດຜູ້ຫນຶ່ງແມ່ນການໃຫ້ບາງສິ່ງບາງຢ່າງທີ່ລາວສົມຄວນໄດ້ຮັບ.

- ລາງວັນສາມາດເປັນສິ່ງທີ່ດີຫລືບອກທີ່ຄົນໄດ້ຮັບເພາະໄດ້ເຮັດສິ່ງທີ່ດີຫລືຍ້ອນວ່າລາວໄດ້ເຊື່ອຟັງພຣະເຈົ້າ.
- ບາງຄັ້ງລາງວັນອາດ ໝາຍ ເຖິງສິ່ງທີ່ບໍ່ດີເຊິ່ງອາດຈະເປັນຜົນມາຈາກການປະພຶດທີ່ບໍ່ດີ, ເຊັ່ນວ່າ ຄໍາວ່າ, "ລາງວັນຂອງຄົນຊົ່ວ".
  ໃນສະພາບການນີ້, "ລາງວັນ" ຫມາຍເຖິງການລົງໂທດຫຼືຜົນກະທົບທາງລົບຈາກການກະທໍາທີ່ມີບາບ.

### ການແນະນໍາໃນການແປ

- ອີງຕາມສະພາບການ, ຄໍາວ່າ "ລາງວັນ" ສາມາດຖືກແປເປັນ "ການຈ່າຍເງິນ" ຫລື "ບາງສິ່ງບາງຢ່າງທີ່ສົມຄວນ" ຫລື "ການລົງໂທດ."
- "ເພື່ອໃຫ້ລາງວັນ" ຜູ້ໃດຜູ້ຫນຶ່ງສາມາດຖືກແປໂດຍ "ການຕອບແທນ" ຫລື "ການລົງໂທດ" ຫລື "ໃຫ້ສິ່ງທີ່ສົມຄວນ."
- ຮັບປະກັນວ່າການແປ ຄໍາສັບນີ້ບໍ່ໄດ້ໝາຍເຖິງຄ່າຈ້າງ. ລາງ ວັນບໍ່ແມ່ນໂດຍສະເພາະກ່ຽວກັບການຫາເງິນເຊິ່ງເປັນສ່ວນ
  ໜຶ່ງຂອງວຽກ.

## ລາຊະໂຣ

### ຂໍ້ເທັດຈິງ

ລາຊະໂຣ ແລະ ເອື້ອຍເອື້ອຍຂອງລາວ, ມາລີ ແລະ ມາທາເປັນເພື່ອນພິເສດຂອງພຣະເຢຊູ.
ພຣະອົງມັກມາອາໄສກັບພວກເຂົາທີ່ບ້ານຂອງພວກເຂົາໃນ ເບັດທານີ.

- ລາຊະໂຣເປັນທີ່ຮູ້ຈັກກັນດີສໍາລັບຂໍ້ແທ້ຈິງວ່າ ພຣະເຢຊູໄດ້ຊຸບຊີວິດລາວຈາກຄວາມຕາຍຫຼັງຈາກທີ່ຖືກຝັງໄວ້ຫີລຸໂມງຫຼາຍວັນແລ້ວ.
- ຜູ້ນໍາຊາວຢິວທັ່ງຫຼາຍເກີດຄວາມຢາກຮ້າຍ ແລະ ອິດສາວ່າພຣະເຢຊູໄດ້ເຮັດສິ່ງທີ່ອັດສະຈັນ ແລະ
  ພວກເຂົາພະຍາຍາມຫາວິທີທາງທີ່ຈະຂ້າພຣະເຢຊູ ແລະ ລາຊະໂຣ.
- ພຣະເຢຊູໄດ້ຊົ່ງກ່າວຄໍາອຸປະມາເລື່ອງຜູ້ຊາຍຂໍທານຢາກຈົນຄົນໜຶ່ງ ແລະ ເສດຖີຄົນໜຶ່ງ ເຊິ່ງຂໍທານນັ້ນມີຊື່ວ່າ ລາຊະໂຣ.

## ລາຍງານ

### ນິຍາມ

ຄໍາວ່າ "ລາຍງານ" ໝາຍເຖິງການບອກຄົນອື່ນກ່ຽວກັບບາງສິ່ງບາງຢ່າງທີ່ເກີດຂຶ້ນ, ມັກຈະໃຫ້ລາຍລະອຽດກ່ຽວກັບເຫດການນັ້ນ.
ບົດລາຍງານສາມາດເວົ້າຫລືຂຽນໄດ້.

- "ບົດລາຍງານ" ຍັງສາມາດແປເປັນ "ບອກ" ຫຼື "ອະທິບາຍ" ຫຼື "ບອກລາຍລະອຽດຂອງ."
- ຄໍາ ເວົ້າທີ່ວ່າ, "ລາຍງານນີ້ບໍ່ໃຫ້ໃຜ" ສາມາດແປເປັນ "ຢ່າເວົ້າກ່ຽວກັບເລື່ອງນີ້ກັບຜູ້ອື່ນ" ຫຼື "ຢ່າບອກໃຜກ່ຽວກັບເລື່ອງນີ້."
- ວິທີການແປ "ບົດລາຍງານ" ສາມາດປະກອບມີ, "ຄໍາອະທິ ບາຍ" ຫລື "ເລື່ອງ" ຫລື "ບັນຊີລາຍລະອຽດ," ຂຶ້ນກັບສະພາບການ.

## ລານ, ສະໜາມ, ສານ

### ນິຍາມ

ຄໍາວ່າ "ລານ" ແລະ "ສານ" ກ່າວເຖິງພື້ນທີ່ປິດລ້ອມ ແລະອ້ອມຮອບດ້ວຍກໍາແພງ. ຊຶ່ງເບື້ອງເທິງເປີດອອກສູ່ທ້ອງຟ້າ ຄໍາວ່າ "ສານ"
ຍັງໝາຍເຖິງສະຖານທີ່ຊຶ່ງຜູ້ພິພາກສາຕັດສິນທາງກົດໝາຍ ແລະເລື່ອງກ່ຽວກັບອາດສະຍາກໍາທັ່ງຫລາຍ.

- ຫໍເຕັ້ນອ້ອມຮອບໄປດ້ວຍລານໜຶ່ງຊຶ່ງອ້ອມຮອບດ້ວຍກໍາແພງທີ່ເຮັດຈາກ, ຜ້າກັ້ງໝາງ.
- ບໍລິເວນວິຫານມີລານດ້ານໃນສາມດ້ານ: ໜຶ່ງດ້ານສໍາລັບປະໂຣຫິດ, ໜຶ່ງດ້ານສໍາລັບຜູ້ຊາຍຊາວຢິວ,
  ແລະໜຶ່ງດ້ານສໍາລັບຜູ້ຍິງຊາວຢິວ.
- ລານພາຍໃນເຫຼົ່ານີ້ອ້ອມຮອບດ້ວຍກໍາແພງຫີນຕ່ໍາກ່ວາກັນທີ່ແຍກກັນຈອກຈາກລານດ້ານນອກ
  ຊຶ່ງອະນຸຍາດໃຫ້ຄົນຕ່າງຊາດສາມາດນະມັດສະການໄດ້.
- ລານບ້ານເປັນທີ່ໂລ່ງຢູ່ທາງກາງບ້ານ.

- ຄຳເວົ້າ "ລານຂອງພຣະຣາຊາ" ສາມາດກ່າວເຖິງພຣະຣາຊວັງ

ຫຼື ສະຖານທີ່ໃນພຣະຣາຊວັງຂອງກະສັດ ຊຶ່ງຊຶ່ງໃຊ້ຄຳຕັດສິນຄະດີຄວາມ.

- ການກ່າວວ່າ, "ລານຂອງພຣະເຈົ້າຢາເວ"ເປັນຫໍານອງປຽບທຽບ ກ່າວເຖິງສະຖານທີ່ປະທັບຂອງພຣະເຈົ້າຢາເວ ຫຼື

ເປັນສະຖານທີ່ປະຊາຊົນໄປເພື່ອນະມັດສະການພຣະເຈົ້າຢາເວ.

### ຄຳແນະນຳໃນການແປ

- ຄຳວ່າ "ລານ"ອາດແປເປັນ "ພື້ນທີ່ປິດລ້ອມ" ຫຼື "ທີ່ດິນທີ່ມີກຳແພງອ້ອມຮອບ" ຫຼື "ບໍລິເວນວິຫານ" ຫຼື "ຮົ້ວອ້ອມຮອບພຣະວິຫານ."
- ບາງຄັ້ງຄຳວ່າ "ວິຫານ" ອາດຕ້ອງແປວ່າ "ລານວິຫານ" ຫຼື "ບໍລິເວນພຣະວິຫານ" ເຫັນໄດ້ຊັດເຈັນວ່າລານວິຫານ, ບໍ່ແມ່ນຕົວອາຄານວິຫານ.
- ຄຳວ່າ, "ລານຂອງພຣະເຈົ້າຢາເວ" ອາດແປວ່າ, "ສະຖານທີ່ຊຶ່ງພຣະເຈົ້າຢາເວຊົງປະທັບຢູ່" ຫຼື "ສະຖານທີ່ໆພຣະເຈົ້າຢາເວໄດ້ຮັບການນະມັດສະການ."
- ຄຳທີ່ໃຊ້ສຳລັບລານ ຂອງພຣະຣາຊາຍັງສາມາດນຳມາໃຊ້ເພື່ອກ່າວເຖິງລານຂອງພຣະເຈົ້າຢາເວໄດ້ດ້ວຍ.

## ລາເມດ

### ຂ້ເທັດຈິງ

ລາເມດເປັນຊື່ຂອງຜູ້ຊາຍສອງຄົນທີ່ໄດ້ຮັບການການກ່າວເຖິງໃນພຣະຄຳປະຖົມມະການ

- ລາເມດເປັນຄົນທຳອິດທີ່ໄດ້ຮັບການກ່າວເຖິງເປັນເຊື້ອສາຍຂອງກາອິນ ລາວໄດ້ໂອ້ອວດຕໍ່ເມຍຂອງລາວທັ້ງສອງຂອງລາວ ວ່າລາວໄດ້ຂ້າຊາຍຄົນໜຶ່ງທີ່ເຮັດໃຫ້ລາວໄດ້ຮັບບາດເຈັບ.
- ລາເມດຄົນທີ່ສອງເປັນເຊື້ອສາຍຂອງເຊດ ລາວເປັນບິດາຂອງໂນອາ

## ລາຊີນີ

### ນິຍາມ

- ລາຊີນີເປັນຜູ້ປົກຄອງທີ່ເປັນຜູ້ຍິງຫຼືຜູ້ແຕ່ງງານກັບກະສັດ.

ເອສະເທີ້ກາຍເປັນລາຊີນີແຫ່ງເປີເຊຍເມື່ອລາວແຕ່ງງານກັບກະສັດ ອາຫາບ.

- ລາຊີນີເຈເຊີບຢ ເປັນພັນລະຍາທີ່ຊົ່ວຮ້າຍຂອງກະສັດ ອາຫາບ.
- ລາຊີນີຂອງ ເຊບ້າ ເປັນຜູ້ປົກຄອງທີ່ມີຊື່ສຽງດີຜູ້ທີ່ໄດ້ມາຢ້ຽມກະສັດ ສະໂລໂມນ.
- ຄຳວ່າ "ລາຊີນີ ອາທາລີຍາ" ໝາຍເຖິງ ແມ່ຫຼືແມ່ເຖົ້າຂອງກະສັດທີ່ປົກຄອງຢູ່ຫຼືລາຊີນີນີ້ຂອງກະສັດອົງກ່ອນ ແມ່ຂອງກະສັດມີອຳນາດທີ່ນຳຄົນໄປກາບໄຫ້ວຮູບເຄົ່າລົບທີ່ເຮົາເຫັນຕົວຢ່າງຂອງ ລາຊີນີ ອາທາລີຍາ.

## ລີສຕຣາ

### ຂ້ເທັດຈິງ

ລີສຕຣາເປັນຊື່ຂອງເມືອງໃນເອເຊຍໄມເນີ ບູຣານເຊິ່ງໂປໂລໄດ້ໄປຢ້ຽມຍາມໃນການເດີນທາງເປັນຜູ້ປະກາດພຣະຄຳ ເມືອງນີ້ຕັ້ງຢູ່ໃນເຂດແຄ້ນລີຊາວເນຍ ເຊິ່ງປັດຈຸບັດນີ້ເປັນປະເທດຕຸລະກີ

- ໂປໂລ ແລະ ເພື່ອນຮ່ວມງານຂອງເຂົາໄດ້ໝີໄປຍັງເດີບີ ແລະ ລີສຕຣາ ເມື່ອພວກເຂົາຖືກກົດຄີດ່ຶມເຄ້ຽໂດຍພວກຢິວໃນເມືອງຄອນຍາ
- ໃນລີສຕຣາ ໂປໂລໄດ້ພົບກັບຕີໂມທຽວຜູ້ທີ່ໄດກາຍມາເປັນເພື່ອນນັກປະກາດ ແລະ ກໍ່ຕ້ຽງຄຣິດຕະຈັກດ້ວຍກັນ
- ຫລັງຈາກ ໂປໂລໄດ້ຮັກສາຊາຍພິການໃນເມືອງລີສຕຣາ ປະຊາຊົນທີ່ນັ້ນພະຍາຍາມນະມັດສະການໂປໂລ ແລະ ບານາບັດເປັນພະເຈົ້າ ແຕ່ ພວກອັກຄະສາວົກໄດ້ຕຳໜິພວກເຂົາ ແລະ ຢຸດຢັ້ງພວກເຂົາໃນການເຮັດສິ່ງນັ້ນ


generated on Thu Jul 10 08:45:04 2025

## ລິນ

### ນິຍາມ

ໃນພຣະຄຳພີ ມີຄວາມຫມາຍທີ່ເປັນຫໍານອງປຽບທຽບຂອງ "ລິ້ນ" ຫລາຍຢ່າງ.

- ໃນພຣະຄຳພີ,ຄວາມໝາຍເຊິ່ງປຽບທຽບທີ່ໃຊ້ກັນຫລາຍທີ່ສຸດສຳລັບຄຳນີ້ຄື "ພາສາ" ຫລື "ຄຳເວົ້າ."
- ບາງເທື່ອ "ລິ້ນ" ອາດອ້າງເຖິງພາສາມະນຸດທີ່ເວົ້າກັນໂດຍສະເພາະກຸ່ມທີ່ແນ່ນອນ.
- ບາງເທື່ອຄຳນີ້ອາດອ້າງເຖິງພາສາເໜືອທໍາມະຊາດທີ່ພຣະວິນຍານບໍລິສຸດປະທານໃຫ້ແກ່ຜູ້ເຊື່ອໃນພຣະເຢຊູເຊັ່ນເປັນ "ຂອງປະທານຝ່າຍວິນຍານ."
- ຄໍາກ່າວວ່າ, "ລິ້ນ" ຂອງໄຟໝາຍເຖິງ "ເປວ" ຂອງໄຟ.
- ໃນສໍານວນທີ່ວ່າ "ລິ້ນຂອງຂ້ອຍດີໃຈ," ຄໍາວ່າ "ລິ້ນ" ໝາຍເຖິງຄົນທັ້ງໝົດ.
- ຄໍາວ່າ "ລິ້ນນອນ" ໝາຍເຖິງສຽງຫລື ຄໍາເວົ້າຂອງຄົນເຮົາ.

### ຄໍາແນະນໍາໃນການແປ

- ອີງຕາມສະພາບການ, ຄໍາວ່າ "ລິ້ນ" ສາມາດຖືກແປໂດຍ "ພາສາ" ຫລື "ພາສາທາງວິນຍານ." ຖ້າບໍ່ຈະແຈ້ງວ່າມັນເວົ້າເຖິງອັນໃດ, ມັນຈະດີກວ່າທີ່ຈະແປເປັນ "ພາສາ."
- ເມື່ອເວົ້າເຖິງໄຟ, ຄໍາ ສັບນີ້ອາດຈະຖືກແປເປັນ "ແປວໄຟ."
- ສໍານວນທີ່ວ່າ "ລິ້ນຂອງຂ້ອຍຍິນດີ" ສາມາດແປວ່າ "ຂ້ອຍປິຕິຍດີແລະຍ້ອງຍໍພຣະເຈົ້າ" ຫຼື "ຂ້ອຍສັນລະເສີນພະເຈົ້າດ້ວຍຄວາມຍິນດີ."
- ປະໂຫຍກ, "ລິ້ນທີ່ຕົວະ" ສາມາດຖືກແປເປັນ, "ຜູ້ທີ່ເວົ້າຕົວະ" ຫຼື "ຄົນທີ່ຕົວະ."
- ປະໂຫຍກເຊັ່ນ "ກັບລິ້ນຂອງພວກເຂົາ" ສາມາດຖືກແປເປັນ "ກັບສິ່ງທີ່ພວກເຂົາເວົ້າ" ຫຼື "ໂດຍຄໍາເວົ້າຂອງພວກເຂົາ."

## ລູກາ

### ຂ້ເທັດຈິງ

ລູກາເປັນຜູ້ຂຽນພຣະຄໍາສອງເຫລ້ັມໃນພັນທະສັນຍາໃໝ່ ຄື ພ້ະກິດຕິຄຸນ ແລະ ພ້ະຄໍາກິຈະການ

- ໃນຈົດໝາຍຂອງ ໂປໂລທີ່ຂຽນໄປເຖິງຜູ້ເຊື່ອໃນເມືອງ ໂກໂລຊາຍ ໂປໂລ ອ້າງເຖິງລູກາວ່າເປັນທ່ານໝໍ ໂປໂລ ຍັງໄດ້ເວົ້າເຖິງລູກາໃນຈົດໝາຍອີນຽ່ອີກສອງສະບັບຂອງເຂົາດ້ວຍ
- ເຄີຍຄິດກັນວ່າ ລູກາເປັນຊາວກຣີກ ແລະ ຄົນຕ່າງຊາດ ກ່ອນຈະມາຮູ້ຈັກກັບພ້ະເຢຊູ ໃນພ້ະກິດຕິຄຸນຂອງເຂົາ ລູກາລວມການຕອນທີ່ສະແດງໃຫ້ເຫັນເຖິງຄວາມຮັກຂອງພຣະເຢຊູສໍາລັບທຸກຄົນ ທັ້ງຊາວຢິວ ແລະ ຄົນຕ່າງຊາດ
- ລູກາຮ່ວມເດີນທາງເປັນຜູ້ປະກາດພຣະຄໍາກັບໂປໂລສອງຄັ້ງ ແລະ ໄດ້ຊ່ວຍໂປໂລໃນການເຮັດວຽກງານຂອງເຂົາ
- ໃນການຂຽນບາງສ່ວນຂອງງານຂອງຄຣິດຕະຈັກທໍາອິດ ໄດ້ເວົ້າໄວ້ວ່າລູກາໄດ້ເກີດໃນເມືອງອັນທີໂອເຢັຍໃນຊີເຣຍ

## ລູກແກະ, ລູກແກະຂອງພະເຈົ້າ

### ນິຍາມ

ຄໍາວ່າ " ລູກແກະ " ໝາຍເຖິງແກະທີ່ຍັງອາຍຸນ້ອຍ ແລະ ເປັນສັດທີ່ມີສີຂາ ມີ ຂົນຫນາເປັນປຸຍປຸຍ ໃຊ້ເພື່ອເປັນເຄື່ອງບູຊາຖວາຍແກ່ພຣະເຈົ້າ. ພຣະເຢຊູ ຊຶ່ງຖືກເອີ້ນວ່າເປັນ" ລູກແກະຂອງພຣະເຈົ້າ" ເພາະພຣະອົງຖູກຖວາຍເປັນເຄື່ອງບູຊາເພື່ອຄວາມບາບຂອງຄົນ.

- ສັດເຫຼົ່ານີ້ຖືກນໍາໃຊ້ຫຼົ່ງທາງໄດ້ຢ່າງງ່າຍດາຍ ແລະ ຕ້ອງການ ການປົກຄອງ ພຣະເຈົ້າຊຶ່ງປຽບມະນຸດວ່າເປັນແກະ .
- ພຣະເຈົ້າຊຶ່ງສັ່ງໃຫ້ປະຊາກອນຂອງພຣະອົງຖວາຍແກະ ແລະ ລູກແກະ ປະສະຈາກມົນທິນເປັນເຄື່ອງບູຊາແດ່ພຣະອົງ
- ພຣະເຢຊູຊຶ່ງຖືກເອີ້ນວ່າເປັນ " ລູກແກະຂອງພຣະເຈົ້າ " ຜູ້ທີ່ຖືກຖວາຍເປັນເຄື່ອງບູຊາເພື່ອຄວາມບາບຂອງຄົນ ພຣະອົງຊຶ່ງສົມບູນແບບ ປາສະຈາກມົນທິນ ເພາະພຣະອົງບໍ່ມີບາບເລີຍ.

### ຄໍາເນາະນໍາໃນການແປ

- ຖ້າແກະເປັນທີ່ຮູ້ຈັກກັນດີໃນດ້ານພາສາທ້ອງຖິ່ນ. ຊື່ສໍາລັບແກະທີ່ຍັງອາຍຸນ້ອຍຄວນແປໂດຍໃຊ້ຄໍາວ່າ "ລູກແກະ " ຫຼື " ລູກແກະຂອງພຣະເຈົ້າ. "
- " ລູກແກະຂອງພຣະເຈົ້າ " ສາມາດແປໄດ້ວ່າ " ຂອງພຣະເຈົ້າ "


generated on Thu Jul 10 08:45:04 2025

## ລູກສາວແຫ່ງສີໂອນ

### ນິຍາມ

" ລູກສາວແຫ່ງສີໂຢນ" ເປັນ ຄໍາ ປຽບທຽບ ກ່າວເຖິງຊົນຊາດອິສຣະເອນ. ມັກໃຊ້ໃນຄວາມພະຍາກອນຕ່າງໆ

- ໃນ ພັນທະສັນຍາເດີມ, " ສີໂຢນ" ມັກຖືກໃຊ້ ເປັນອີກ ຊື່ຫນຶ່ງຂອງ ກຸງເຢຣູຊາເລມ.
- ທັງ " ສີໂຢນ" ແລະ "ກຸງເຢຣູຊາເລມ" ຍັງ ໃຊ້ເພື່ອກ່າວ ເຖິງອິສາເອນ.
- ຄໍາວ່າ " ລູກສາວ" ເປັນ ຄໍາ ທີ່ມີຄວາມຮັກ ແລະ ເອັນດູ ຫລືຄວາມຮັກ. ເປັນການ ປຽບທຽບ ສໍາຫລັບ ຄວາມອຶດທົນ ແລະຄວາມຫ່ວງໃຍ ທີ່ພຣະເຈົ້າ ຊົງມີ ຕໍ່ໄພ່ພົນ ຂອງພຣະອົງ.

### ຄໍາ ແນະນໍາໃນການແປ

- ວິທີ ແປຄໍານີ ຄວນຈະຣວມ, "ອິສຣະເອນລູກສາວຂອງເຮົາ ຈາກສີໂອນ" ຫລື" ໄພ່ພົນ ອິສຣາເອນ ທີ່ຮັກຂອງເຮົາ".
- ເປັນ ການດີທີ່ສຸດ ໃນການຮັກສາ ຄໍາວ່າ "ສີໂຢນ" ໃນ ສໍານວນນີ ເນື່ອງຈາກ ມີການໃຊ້ຫລາຍຄັ້ງ ໃນພຣະຄໍາພີ ຂ້ສັ່ງເກດອາດລວມ ຢູ່ໃນ ການແປ ເພື່ອອະທິບາຍ ຄວາມໝາຍ ທີ່ປຽບທຽບແລະ ໃຊ້ໃນການພຍາກອນຕ່າງໆ.
- ເປັນ ການດີ ທີ່ຈະໃຊ້ຄໍາວ່າ " ລູກສາວ ໃຊ້ໃນ ການແປ ສໍານວນນີ ຖ້າເຮັດໃຫ້ເຂົ້າໃຈໄດ້ ຢ່າງຖືກຕ້ອງ.

## ລົງໂທດ, ການລົງໂທດ

### ນິຍາມ

ຄໍາວ່າ "ລົງໂທດ" ໝາຍເຖິງການເຮັດໃຫ້ໃຜສັກຄົນຕ້ອງທົນທຸກທໍລະມານກັບຜົນດ້ານລົບທີ່ຕາມມາເພາະການເຮັດບາງສິ່ງບາງຢ່າງຜິດ ຄໍາວ່າ "ການລົງໂທດ" ອ້າງເຖິງຜົນທີ່ຕາມມາດ້ານລົບທີ່ໃຫ້ເປັນຜົນຈາກການປະພຶດຜິດ

- ຫລາຍເທື່ອການລົງໂທດມີຈຸດມຸ້ງໝາຍເພື່ອກະຕຸ້ນຄົນໃຫ້ຢຸດເຮັດບາບ
- ພະເຈົ້າໄດ້ຊົງລົງໂທດຊາວອິດສະຣາເອນເມື່ອພວກທ່ານບໍ່ເຊື່ອຟັງພະອົງ ສະເພາະຢ່າງຍິ່ງເມື່ອພວກທ່ານນະມັດສະການພະທຽມເທັດ ເພາະຄວາມບາບຂອງພວກເຂົາ ພະເຈົ້າອະນຸຍາດໃຫ້ສັດຕູຂອງພວກເຂົາໂຈມຕີແລະຈັບພວກເຂົາໄປເປັນຊະເລີຍ
- ພະເຈົ້າຊົງມັກທໍາແລະຍຸດຕິທໍາ ພະອົງຈຶ່ງຕ້ອງລົງໂທດຄວາມບາບ ມະນຸດທຸກຄົນໄດ້ເຮັດບາບຕໍ່ຕ້ານພະເຈົ້າແລະສົມຄວນກັບການລົງໂທດ
- ພະເຢຊູຖືກລົງໂທດເພື່ອສິ່ງຊ້ວທຸກຢ່າງທີ່ທຸກຄົນໄດ້ກະທໍາ ພະອົງໄດ້ຮັບເອົາການລົງໂທດຂອງແຕ່ລະຄົນເທິງພະອົງເຖິງວ່າພະອົງຈະຊົງບໍ່ໄດ້ເຮັດຜິດແລະບໍ່ສົມຄວນທີ່ຈະໄດ້ຮັບການລົງໂທດ
- ຄໍາກ່າວທີ່ວ່າ "ໄປໂດຍບໍ່ຕ້ອງຖືກລົງໂທດ" ຫລື "ປ່ອຍໄປໂດຍບໍ່ລົງໂທດ" ໝາຍເຖິງຕັດສິນໃຈທີ່ບໍ່ລົງໂທດຄົນສໍາລັບການກະທໍາຂອງພວກເຂົາ ຫລາຍເທື່ອພະເຈົ້າອະນຸຍາດໃຫ້ຄວາມບາບໄປບໍ່ຖືກລົງໂທດໃນຂະນະທີ່ພະອົງຊົງລໍໃຫ້ຄົນກັບໃຈໃໝ່

## ລິດຮົບ

### ນິຍາມ

ໃນສະໄໝໂບລານ ລິດຮົບມີນ້ໍາຫນັກເບົາ ມີສອງລໍ້ທີ່ມ້າແກ່ໄປ

- ຄົນອາດຈະນັ່ງຫລືຢືນໃນລິດຮົບ ແລະໃຊ້ລິດລົບເຫລົ່ານີເຮັດສົງຄາມຫລືເດີນທາງ.
- ໃນສົງຄາມ ກອງທັບທີ່ມີລິດຮົບຈະໄດ້ປຽບໃນເລື່ອງຂອງຄວາມ

ໄວແລະເຄື່ອນທີ່ໄດ້ຢ່າງວ່ອງໄວເຫນືອສັດຕູທີ່ບໍ່ມີລິດຮົບ

- ໃນສະໄຫມ ເອຢິບໂບຮານແລະໂຣມມີຊື່ສຽງໃນການໃຊ້ມ້າແລະລິດຮົບ.


generated on Thu Jul 10 08:45:04 2025

## ລຶບລ້າງອອກ, ລຶບອອກໄປ

### ນິຍາມ

ຄຳສັບທີ່ວ່າ "ລຶບລ້າງອອກ" ແລະ "ລຶບອອກ" ແມ່ນສຳນວນທີ່ມີຄວາມໝາຍວ່າຈະເອົາຫຼື ທຳລາຍສິ່ງໃດສິ່ງໜຶ່ງ ຫລືຜູ້ໃດຜູ້ໜຶ່ງ ອອກໄປ.

- ຄຳເວົ້າເຫຼົ່ານີ້ສາມາດຖືກນຳໃຊ້ໃນແງ່ບວກ, ຄືກັບວ່າ"ເຮັດຜິດ" ຕໍ່ພຣະເຈົ້າໂດຍການໃຫ້ອະໄພແລະເລືອກທີ່ຈະບໍ່ຈື່ມັນ.
- ມັນຍັງຖືກນຳໃຊ້ເລື້ອຍໆໃນແງ່ລົບ, ຄືກັບວ່າພຣະເຈົ້າ "ທຳຈັດ" ຫລື "ເຊັດ" ກຸ່ມຄົນ, ທຳລາຍພວກມັນຍ້ອນບາບຂອງພວກເຂົາ.
- ພຣະຄຳພີກ່າວເຖິງຊື່ຂອງບຸກຄົນທີ່ຖືກ“ ທຳຈັດ” ຫລື“ ລຶບລ້າງ” ໃນປຶ້ມແຫ່ງຊີວິດຂອງພຣະເຈົ້າ, ຊຶ່ງໝາຍຄວາມວ່າຄົນນັ້ນຈະບໍ່ໄດ້ຮັບຊີວິດນິລັນດອນ.

### ຄຳແນະນຳໃນການແປ

- ອີງຕາມສະພາບການ, ຄຳສັບເຫຼົ່ານີ້ສາມາດຖືກແປວ່າ "ກຳ ຈັດ" ຫລື "ກຳຈັດ" ຫລື "ທຳລາຍ" ຫລື "ລຶບອອກໝົດ".
- ໃນເວລາທີ່ກ່າວເຖິງການກະທຳຜິດຊື່ຂອງຜູ້ໃດຜູ້ໜຶ່ງອອກຈາກປຶ້ມແຫ່ງຊີວິດ, ສິ່ງນີ້ອາດຈະຖືກແປເປັນ, "ຖືກລຶບອອກຈາກປຶ້ມແຫ່ງຊີວິດ" ຫລື "ຖືກລຶບອອກ."

## ລ້ຳຄ່ຳ

### ນິຍາມ

ຄຳວ່າ ''ລ້ຳຄ່ຳ'' ອະທິບາຍເຖິງຄົນ ຫລື ສິ່ງຂອງທີ່ໄດ້ຮັບການພິຈາລະນາວ່າມີຄ່າຫລາຍ.

- ຄຳວ່າ ''ຫີນລ້ຳຄ່ຳ'' ຫລື ''ອັນຍະມະນີລ້ຳຄ່ຳ''ອ້າງເຖິງກ້ອນຫີນແລະແຮ່ທາດທີ່ມີສີສັນ ຫລື ມີຄຸນນະພາບທີ່ແຕກຕ່າງອອກໄປທີ່ເຮັດໃຫ້ພວກມັນເບິ່ງງົດງາມ ຫລື ມີປະໂຫຍດ.
- ຕົວຢ່າງຂອງຫີນລ້ຳຄ່ຳລວມໄປເຖິງເພັດ, ທັບທິມແລະມໍລະກົດ.
- ທອງແລະເງິນເອີ້ນວ່າ ''ໂລຫະລ້ຳຄ່ຳ.''
- ພຣະເຢໂຮວາເວົ້າວ່າ ປະຊາກອນຂອງພຣະອົງນັ້ນ ''ລ້ຳຄ່ຳ'' ໃນສາຍພຣະເນດຂອງພຣະອົງ (ເອຊາຢາ 43:4).
- ເປໂຕໄດ້ຂຽນໄວ້ວ່າ ຄົນສຸພາບອ່ອນນ້ອມແລະຈິດວິນຍານທີ່ງຽບສະຫງົບມີຄ່ຳໃນສາຍພຣະເນດຂອງພຣະເຈົ້າ (1ເປໂຕ 3:4)ດ້ວຍ.
- ຄຳນີ້ສາມາດແປໄດ້ອີກວ່າ, ''ມີຄ່ຳ'' ຫລື ''ເປັນທີ່ຮັກຫລາຍ'' ຫລື ''ຮັກແລະໃສ່ໃຈ'' ຫລື ''ມີມູນຄ່ຳສູງ.''

## ວັນຕັດສິນ, ວັນພິພາກສາ

### ນິຍາມ

ຄຳວ່າ “ວັນຕັດສິນ“ ໝາຍເຖິງເວລາໃນອະນາຄົດທີ່ພຣະເຈົ້າຈະພິພາກສາທຸກໆຄົນ.

- ພຣະເຈົ້າໄດ້ແຕ່ງຕັ້ງພຣະບຸດຂອງພຣະອົງ, ຄືພຣະເຢຊູຄຣິດເຈົ້າ, ໃຫ້ເປັນຜູ້ພິພາກສາຂອງປະຊາຊົນ.
- ໃນວັນຕັດສິນ, ພຣະຄຣິດຈະພິພາກສາປະຊາຊົນເທິງພື້ນຖານລັກສະນະອັນຊອບທຳຂອງພຣະອົງ.

### ຄຳແນະນຳ ໃນການແປ

- ຄຳສັບນີ້ຍັງສາມາດແປໄດ້ວ່າ “ເວລາຕັດສິນ“ ເພາະມັນອາດຈະໝາຍເຖິງຫລາຍກວ່າໜຶ່ງມື້.
- ອີກວິທີໜຶ່ງໃນການແປຄຳສັບນີ້ອາດລວມ, ເວລາສຸດທ້າຍທີ່ພຣະເຈົ້າຈະພິພາກສາຄົນທັງໝົດ.
- ການແປບາງພາສາໃຊ້ຄຳສຳຄັນດັ່ງກ່າວນີ້ ເພື່ອສະແດງເປັນຊື່ຂອງວັນເວລາພິເສດ: “ວັນຕັດສິນ“ ຫລື “ເວລາຕັດສິນ.“

## ວັນສະບາໂຕ

### ນິຍາມ

ຄຳວ່າ ”ວັນສະບາໂຕ”
ແມ່ນອ້າງເຖິງວັນທີ່ເຈັດຂອງສັບປະດາທີ່ພຣະເຈົ້າໄດ້ສັ່ງໄວ້ໃຫ້ຊາວອິສຣາເອນແຍກອອກໃຫ້ເປັນວັນໃນການພັກຜ່ອນແລະບໍ່ໃຫ້ເຮັດວຽກ.

- ຫລັງຈາກທີ່ພຣະເຈົ້າໄດ້ສຳເລັດໃນການນິລະມິດສ້າງໂລກໃນວັນທີ່ຫົກພຣະອົງຊົງພັກຜ່ອນໃນວັນທີ່ເຈັດ ໃນທຳນອງດຽວກັນ ພຣະເຈົ້າກໍໄດ້ບັນຊາໃຫ້ຊາວອິດສະຣາເອນຕັ້ງວັນທີ່ເຈັດໃຫ້ເປັນວັນພິເສດເພື່ອພັກຜ່ອນແລະນະມັດສະການພຣະອົງ.


generated on Thu Jul 10 08:45:04 2025

- ຄຳສັ່ງໃຫ້ "ຮັກສາວັນສະບາໂຕໃຫ້ບໍລິສຸດ"
  ເປັນຂໍ້ນຶ່ງໃນພຣະບັນຍັດສິບປະການທີ່ພຣະເຈົ້າໄດ້ຂຽນໄວ້ໃນແຜ່ນຫີນຊຶ່ງພຣະອົງໄດ້ປະທານໃຫ້ໂມເຊໄວ້ເພື່ອຊາວອິດສະຣາເອນ.
- ຕາມຫຼັກການໃນການນັບວັນຕ່າງໆຂອງຊາວຢິວ,
  ວັນສະບາໂຕເລີ່ມຕົ້ນໃນວັນສຸກຊ່ວງທີ່ຕາເວັນຕົກແລະໄປຈົນເຖິງວັນເສົາຕອນຕາເວັນຕົກ.
- ບາງຄັ້ງໃນພຣະຄຳພີຈະເອີ້ນສະບາໂຕວ່າ "ວັນສະບາໂຕ" ຫລາຍກວ່າແທນທີ່ຈະເອີ້ນແຕ່ສະບາໂຕ.

%ຄຳແນະນຳໃນການແປ

- ຄຳນີ້ສາມາດແປໄດ້ວ່າ "ວັນຢຸດພັກ" ຫຼື "ວັນສຳລັບການຢຸດພັກ ຫຼື ວັນທີ່ບໍ່ເຮັດວຽກຫລື "ວັນແຫ່ງການຢຸດພັກຂອງພຣະເຈົ້າ"
- ຄຳແປບາງສຳນວນໄດ້ຂຶ້ນຕົ້ນຄຳນີ້ດ້ວຍໂຕອັກສອນໃຫຍ່ເພື່ອສະແດງວ່ານີ້ເປັນວັນພິເສດເຊັ່ນ "ວັນສະບາໂຕ" ຫລືວັນຢຸດພັກພ່ອນ.
- ໃຫ້ພິຈາລະນາວ່າຄຳນີ້ໄດ້ແປຢ່າງໃດໃນທ້ອງຖິ່ນແລະພາສາການ.

## ວັນສຸດທ້າຍ, ວາລະສຸດທ້າຍ, ໃນສະໄໝປັດຈຸບັນ

### ນິຍາມ

ຄຳວ່າ " ວັນສຸດທ້າຍ " ຫຼື " ສະໄໝປັດຈຸບັນ " ໂດຍທົ່ວໄປອ້າງອີງເຖິງເວລາທີ່ນຳພາໄປສູ່ເວລາປັດຈຸບັນ.

- ໃນເວລານີ້ຈະເປັນຊ່ວງເວລາທີ່ບໍ່ມີໃຜຮູ້ໄດ້.
- " ວາລະສຸດທ້າຍ " ຄືເວລາແຫ່ງການພິພາກສາທີ່ໄດ້ທຶ່ລົ່ນເຫຼົ້ານັ້ນໄດ້ຫັນຫນີຈາກພຣະເຈົ້າ.

### ຄຳແນະນຳໃນການແປ

- ຄຳວ່າ " ວາລະສຸດທ້າຍ " ສາມາດແປວ່າ " ວັນສິ້ນສຸດ" ຫຼື " ໃນເວລາສຸດທ້າຍ " ຫຼື " ວັນສິ້ນສຸດ. "
- ໃນສະພາບການນ ນີ້ສາມາດແປວ່າ " ວັນສິ້ນສຸດຂອງໂລກ " ຫຼື " ເມື່ອໂລກນີ້ສິ້ນສຸດ. "

## ວາຊະຕິ

### ຂໍ້ເທັດຈິງ

ໃນພັນທະສັນຍາເດີມພຣະທຳເອສະເທ, ວາຊະຕິເປັນຣາຊີນີຂອງກະສັດເຊເຊັດ, ກະສັດແຫ່ງເປີເຊຍ

- ກະສັດເຊເຊັດໄດ້ເນລະເທດຣາຊີນີວາຊະຕິໄປເມື່ອເພິ່ນປະຕິເສດທີ່ຈະປະຕິບັດຕາມຄຳສັ່ງຂອງກະສັດໃຫ້ມາງານລ້ຽງອາຫານຄຳຂອງພຣະອົງແລະສະແ
- ເອັນກໍຄື ໄດ້ມີການຄົ້ນຫາຜູ້ທີ່ຈະເປັນຣາຊີນີອົງໃໝ່ ແລະໃນທີ່ສຸດ ເອສະເທີກໍໄດ້ຮັບເລືອກເປັນຣາຊີນີອົງໃໝ່ຂອງກະສັດ.

## ວິນຍານ, ຝ່າຍວິນຍານ

### ນິຍາມ

ຄຳວ່າ "ວິນຍານ" ອ້າງເຖິງສ່ວນທີ່ບໍ່ແມ່ນຊີ້ນໜັງຂອງຄົນຊຶ່ງບໍ່ສາມາດເບິ່ງເຫັນໄດ້ ເມື່ອບຸກຄົນຕາຍ. ວິນຍານຂອງເຂົາໄດ້ຈາກຮ່າງຂອງເຂົາ.
"ວິນຍານ" ສາມາດອ້າງເຖິງທັດສະນະຄະຕິຫລືສະພາບທາງອາລົມ.

- ຄຳວ່າ "ວິນຍານ" ໝາຍເຖິງຕົວຕົນທີ່ບໍ່ມີຮ່າງກາຍ, ໂດຍສະເພາະວິນຍານຊົ່ວ.
- ວິນຍານຂອງບຸກຄົນ ເປັນສ່ວນໜຶ່ງຂອງເຂົາທີ່ສາມາດຮູ້ຈັກພຣະເຈົ້າແລະເຊື່ອໃນພຣະອົງ.
- ໂດຍທົ່ວໄປ ຄຳວ່າ "ຝ່າຍວິນຍານ" ອະທິບາຍເຖິງສິ່ງທີ່ບໍ່ແມ່ນເນື້ອໜັງທາງໂລກ.
- ໃນພຣະຄຳພີ, ຈະມີຄວາມໝາຍໂດຍສະເພາະອ້າງເຖິງສິ່ງໃດທີ່ກ່ຽວຂ້ອງກັບພຣະເຈົ້າ, ໂດຍສະເພາະກັບພຣະວິນຍານບໍລິສຸດ.
- ຍົກຕົວຢ່າງເຊັ່ນ, "ອາຫານຝ່າຍວິນຍານ" ອ້າງເຖິງຄຳສອນຂອງພຣະເຈົ້າທີ່ໃຫ້ການຫລໍ່ລ້ຽງວິນຍານຂອງບຸກຄົນ,
  "ສະຕິປັນຍາຝ່າຍວິນຍານ" ອ້າງເຖິງຄວາມຮູ້ແລະການປະພຶດທີ່ມັກທຳທີ່ມາຈາກລິດຂອງພຣະວິນຍານບໍລິສຸດ.
- ພຣະເຈົ້າຊຶ່ງເປັນພຣະວິນຍານແລະພຣະອົງຊຶ່ງເປັນພຣະຜູ້ເນລະມິດເຫລົ່າວິນຍານອື່ນທີ່ບໍ່ມີຮ່າງກາຍຊີ້ນໜັງ.
- ເຫລົ່າທູດສະຫວັນເປັນວິນຍານທີ່ມີຊີວິດ, ທັ້ງໝົດເຖິງເຫລົ່າວິນຍານທີ່ກະບົດຕໍ່ພຣະເຈົ້າແລະກາຍເປັນວິນຍານຊົ່ວ.
- ຄຳວ່າ "ວິນຍານແຫ່ງ" ສາມາດໝາຍເຖິງ "ການມີລັກສະນະເຈົ້າຂອງ," ຢ່າງເຊັ່ນໃນ, "ຈິດວິນຍານຂອງປັນຍາ" ຫລື
  "ໃນວິນຍານຂອງເອລີຢາ."
- ຕົວຢ່າງຂອງ"ວິນຍານ" ເຊັ່ນໃນທັດສະນະຄະຕິຫລືອາລົມຈະທັ້ງຫມົດເຖິງ "ວິນຍານແຫ່ງຄວາມຢ້ານ" ຫລື
  "ວິນຍານແຫ່ງຄວາມອິດສາ."


generated on Thu Jul 10 08:45:04 2025

%ເບິ່ງເພີ່ມຕື່ມ

- ຂຶ້ນຢູ່ກັບສະຖານະການ, ບາງວິທີໃນການແປ "ວິນຍານ" ອາດລວມ "ບໍ່ເປັນດ້ານຮ່າງກາຍ," ຫລື "ສ່ວນຂ້າງໃນ" ຫລື "ຊີວິດທີ່ຢູ່ຂ້າງໃນ."
- ໃນຄໍາວ່າ "ວິນຍານ" ສາມາດແປວ່າ "ວິນຍານຊົ່ວ" ຫລື "ຕົວຕົນວິນຍານຊົ່ວ."
- ບາງເທື່ອ ຄໍາວ່າ "ວິນຍານ" ຖືກໃຊ້ເພື່ອສະແດງເຖິງຄວາມຮູ້ສຶກຂອງບຸກຄົນທີ່ຢູ່ຂ້າງໃນ, "ວິນຍານຂອງຂ້ອຍໂສກເສົ້າຢູ່ໃນຮ່າງຂອງຂ້ອຍ." ນີ້ສາມາດແປວ່າ, "ຂ້ອຍຮູ້ສຶກໂສກເສົ້າໃນວິນຍານຂອງຂ້ອຍ" ຫລື "ຂ້ອຍຮູ້ສຶກໂສກເສົ້າຢູ່ເລິກໆ."
- ຄໍາວ່າ "ວິນຍານຂອງ" ສາມາດແປວ່າ, "ບຸກຄະລິກລັກສະນະຂອງ" ຫລື "ອິດທິພົນຂອງ" ຫລື "ທັດສະນະຄະຕິຂອງ" ຫລື "ຄວາມຄິດຂອງ"

## ວິສຸທິສະຖານ, ອະພິສຸທິສະຖານ

### ນິຍາມ

ໃນພຣະຄໍາພີ, ຄໍາວ່າ "ວິສຸທິສະຖານ" ແລະ "ອະພິສຸທິສະຖານ" ອ້າງເຖິງຫ້ອງສອງຫ້ອງໃນຫໍເຕັ້ນຫລືອາຄານພຣະວິຫານ.

- "ວິສຸທິສະຖານ" ເປັນຫ້ອງທໍາອິດແລະປະກອບດ້ວຍແທ່ນບູຊາສໍາລັບເຄື່ອງຫອມແລະໂຕະທີ່ມີ "ຂະໜົມປັ້ງສັກສິດ" ວາງຢູ່.
- "ອະພິສຸທິສະຖານ" ເປັນຫ້ອງທີສອງ, ທີ່ຢູ່ໃນສຸດແລະມີຫີບພັນທະສັນຍາຕັ້ງຢູ່.
- ຜ້າມ່ານ, ທີ່ໜາແລະໜັກຈະແຍກຫ້ອງທີ່ຢູ່ຫາງດ້ານນອກອອກຈາກຫ້ອງທີ່ຢູ່ຫາງດ້ານໃນ.
- ມະຫາປະໂລຫິດເປັນພຽງຄົນດຽວທີ່ໄດ້ຮັບອະນຸຍາດໃຫ້ເຂົ້າໄປໃນອະພິສຸທິສະຖານ.
- ບາງເທື່ອ "ວິສຸທິສະຖານ" ອ້າງເຖິງອາຄານທັງສອງແຫ່ງແລະບໍລິເວນອ້ອມຮອບຂອງພຣະວິຫານຫລືຫໍເຕັ້ນ ແລະຍັງສາມາດອ້າງເຖິງສະຖານທີ່ໃດກໍໄດ້ທີ່ແຍກໄວ້ສໍາລັບພຣະເຈົ້າ.

### ຄໍາແນະນໍາໃນການແປ

- ຄໍາວ່າ "ວິສຸທິສະຖານ" ສາມາດແປວ່າ, "ຫ້ອງທີ່ແຍກໄວ້ສໍາລັບພຣະເຈົ້າ" ຫລື "ຫ້ອງພິເສດສໍາລັບການພົບກັບພຣະເຈົ້າ" ຫລື "ສະຖານທີ່ສະຫງວນໄວ້ສໍາລັບພຣະເຈົ້າ."
- ຄໍາວ່າ, "ອະພິສຸທິສະຖານ" ສາມາດແປວ່າ, "ຫ້ອງທີ່ແຍກໄວ້ສໍາລັບພຣະເຈົ້າໂດຍສະເພາະ" ຫລື "ຫ້ອງທີ່ພິເສດທີ່ສຸດສໍາລັບການພົບພຣະເຈົ້າ."
- ຂຶ້ນກັບບໍລິບົດ, ວິທີທີ່ຈະແປຄໍາກ່າວໂດຍຫົວໄປ "ວິສຸທິສະຖານ" ສາມາດລວມ "ສະຖານທີ່ສັກສິດ" ຫລື "ສະຖານທີ່ທີ່ພຣະເຈົ້າຊົງແຍກໄວ້ " ຫລື "ສະຖານທີ່ໃນບໍລິເວນພຣະວິຫານ, " ບ່ອນສັກສິດ" ຫລື "ລານແຫ່ງພຣະວິຫານຂອງພຣະເຈົ້າອົງບໍລິສຸດ."

## ວິຫານຂອງພຣະເຈົ້າ, ວິຫານຂອງພຣະເຈົ້າຢາເວ

### ນິຍາມ

ໃນພຣະຄໍາພີ, ວະລີ "ວິຫານຂອງພຣະເຈົ້າ" (ບ້ານຂອງພຣະເຈົ້າ) ແລະ "ວິຫານຂອງພຣະເຈົ້າຢາເວ (ບ້ານຂອງພຣະເຈົ້າຢາເວ) ອ້າງເຖິງສະຖານທີ່ທີ່ມີການນະມັດສະການພຣະເຈົ້າ.

- ຄໍານີ້ຖືກໃຊ້ຢ່າງສະເພາະເຈາະຈົງໃນການໝາຍເຖິງຫໍເຕັ້ນຫລືພຣະວິຫານ.
- ບາງເທື່ອ "ວິຫານຂອງພຣະເຈົ້າ" ຖືກໃຊ້ເພື່ອໝາຍເຖິງຄົນຂອງພຣະເຈົ້າ.

### ຄໍາແນະນໍາໃນການແປ

- ເມື່ອອ້າງເຖິງສະຖານທີ່ໃນການນະມັດສະການ, ຄໍານີ້ສາມາດແປໄດ້ວ່າ, "ວິຫານສໍາລັບນະມັດການພຣະເຈົ້າ" ຫລື "ສະຖານທີ່ສໍາລັບນະມັດການພຣະເຈົ້າ."
- ຖ້າໝາຍເຖິງພຣະວິຫານຫລືຫໍເຕັ້ນ, ຄໍານີ້ອາດຈະແປໄດ້ວ່າ, "ພຣະວິຫານ"

## ວິໄນ, ຄວບຄຸມຕົນເອງ

### ນິຍາມ

ຄໍາວ່າ "ວິໄນ" ກ່າວເຖິງການຝຶກໃຫ້ທີ່ຈະເຊື່ອຕາມຫຼັກເກນພຶດຕິກໍາທາງສິນລະທັມ.

- ຍິດາມານດາຝຶກວິໄນບັນດາບຸດຂອງພວກເຂົາ ໂດຍການຈັດແນວທາງສິນລະທັມສໍາລັບພວກເຂົາ ແລະສອນໃຫ້ພວກເຂົາເຊື່ອຟັງ.
- ໃນຫໍານອງດຽວກັນ ພຣະເຈົ້າຊົງຝຶກວິໄນລູກໆ ຂອງພຣະອົງເພື່ອຊ່ວຍພວກເຂົາເກີດຜົນດີໃນທາງດໍາລົງຊີວິດຝ່າຍວິນຍານ ເຊັ່ນ ຄວາມຍິນດີ, ຄວາມຮັກ,ແລະຄວາມອົດທົນ.
- ການມີວິໄນກ່ຽວຂ້ອງກັບຄໍາແນະນໍາກ່ຽວກັບວິທີທີ່ຈະມີຊີວິດຢູ່ເພື່ອເປັນທີ່ໂປດປານຂອງພຣະເຈົ້າ ແລະເໝືອນການລົງໂທດສໍາລັບພຶດຕິກໍາທີ່ຂັດຕໍ່ພຣະປະສົງຂອງພຣະເຈົ້າ.
- ຄວບຄຸມຕົນເອງຄືຂະບວນການຂອງການໃຊ້ຫຼັກການທາງສິນລະທັມແລະຝ່າຍວິນຍານແກ່ຊີວິດຂອງແຕ່ລະຄົນ.

### ຄໍາແນະນໍາການແປ

- ຂຶ້ນຢູ່ກັບບໍລິບົດ "ວິໄນ" ອາດແປວ່າ "ອົບຮົມແລະສັ່ງສອນ" ຫຼື "ແນວທາງສິນລະທັມ" ຫຼື "ລົງໂທດສໍາລັບການກະທໍາຜິດ".
- ຄໍານາມວ່າ "ວິໄນ" ອາດແປວ່າ "ການຝຶກຝົນທາງສິນລະທັມ" ຫຼື "ການລົງໂທດ" ຫຼື "ການແກ້ໄຂທາງສິນລະທັມ" ຫຼື "ຄໍາແນະນໍາທາງສິນລະທັມແລະການສັ່ງສອນ".

## ວຽກທີ່ຕ້ອງໃຊ້ແຮງ. ຜູ້ເຮັດວຽກ

### ນິຍາມ

ຄໍາວ່າ '' ວຽກທີ່ຕ້ອງໃຊ້ແຮງງານ'' ໝາຍເຖິງການເຮັດວຽກໜັກໃນທຸກຮູບແບບ

- ໂດຍທົ່ວໄປ ວຽກທີ່ຕ້ອງອອກແຮງງານ ຫຼື ວຽກອື່ນໆ. ທີ່ໃຊ້ພະລັງງານ ແລະ ທຸກໆຄັ້ງສະແດງວ່າເປັນວຽກທີ່ຍາກ.
- ຜູ້ເຮັດວຽກຄືບຸກຄະລາກອນຜູ້ທີ່ເຮັດວຽກອື່ນໆ ກະຕ້ອງໃຊ້ແຮງງານ
- ໃນພາສາອັງກິດ " ວຽກທີ່ຕ້ອງໃຊ້ແຮງງານ " ແປວ່າການຄອດລູກ ໃນພາອື່ນບາງທີອາດຈະໃຊ້ຄໍານີ້ແຕກຕ່າງຢ່າງສິ້ນເຊີງ.
- ວິທີການແປຄໍາວ່າ" ວຽກທີ່ຕ້ອງໃຊ້ແຮງງານ " ສາມາດແປວ່າ " ວຽກ " ຫຼື ການເຮັດວຽກໜັກ " ຫຼື " ວຽກຍາກ " ຫຼື " ເຮັດວຽກໜັກ. "

## ສວນສີບ, ສິບສ່ວນສິບ

### ນິຍາມ

ຄໍາສັບ "ສ່ວນສິບ" ແລະ "ສິບສ່ວນສິບ" ໝາຍເຖິງ "ສິບເປີເຊັນ" ຫລື "ໜຶ່ງສ່ວນສິບສ່ວນໜຶ່ງ" ຂອງເງິນ, ຜົນລະປູກ, ສັດລ້ຽງ, ຫລືຊັບສິນອື່ນໆທີ່ມອບໃຫ້ແກ່ພຣະເຈົ້າ.

- ໃນພຣະຄໍາພີເດີມ,
  ພຣະເຈົ້າໄດ້ແນະນໍາຊາວອິດສະຣາເອນໃຫ້ແບ່ງສ່ວນໜຶ່ງຂອງສ່ວນສິບຂອງພວກເຂົາໃຫ້ເປັນເຄື່ອງຖວາຍບູຊາຂອບພຣະໄທ.
- ເຄື່ອງຖວາຍນີ້ໃຊ້ເພື່ອສະໜັບສະໜູນຊົນເຜົ່າເລວີຜູ້ທີ່ຮັບໃຊ້ຊາວອິດສະລາເອນເປັນປະໂລຫິດແລະຜູ້ດູແລຫໍເຕັ້ນແລະຕໍ່ມາແມ່ນວິຫານ.
- ໃນພຣະຄໍາພີໃໝ່, ພຣະເຈົ້າບໍ່ໄດ້ຮຽກຮ້ອງໃຫ້ມີເງິນໜຶ່ງສ່ວນສິບ,
  ແຕ່ພຣະອົງໄດ່ສອນໃຫ້ຜູ້ທີ່ເຊື່ອໄດ້ຖວາຍໜຶ່ງສ່ວນສິບຢ່າງໃຈກວ້າງຂວາງແລະໃຫ້ດ້ວຍຄວາມຍິນດີ
  ແລະສະໜັບສະໜຸນວຽກງານຂອງຊາວຄຣິສຕຽນ.
- ຄໍານີສາມາດແປໄດ້ວ່າເປັນ "ໜຶ່ງສ່ວນສິບ" ຫຼື "ສິບເອົາອອກມາໜຶ່ງ".

## ສວນອະງຸ່ນ

### ນິຍາມ

ສວນອະງຸ່ນເປັນສວນທີ່ມີບໍລິເວນກວ້າງໃຫຍ່ທີ່ປູກອະງຸ່ນ ທີ່ຜົນອະງຸ່ນໄດ້ຮັບການເກັບກ່ຽວ.

- ສວນອະງຸ່ນມັກຈະມີກໍາແພງອ້ອມຮອບເພື່ອປ້ອງກັນຜົນອະງຸ່ນຈາກຂີ້ລັກແລະສັດທັ້ງຫລາຍ.
- ພຣະເຈົ້າຊົງປຽບທຽບຊົນຊາດອິດສະລາເອນກັບສວນອະງຸ່ນທີ່ບໍ່ໄດ້ເກີດຜົນທີ່ດີ.
- ສວນອະງຸ່ນສາມາດແປເປັ, "ສວນໝາກອະງຸ່ນ" ຫລື "ສວນອະງຸ່ນ."


generated on Thu Jul 10 08:45:04 2025

## ສອນ, ການສອນ, ອາຈານ, ໄດ້ສອນ

### ນິຍາມ

ຄໍາວ່າ"ສອນ" ແລະ "ການສອນ" ໝາຍເຖິງການບອກຂໍ້ມູນໃຫ້ຜູ້ອື່ນຮູ້ເຖິງສິ່ງທີ່ເຂົາບໍ່ຮູ້ມາກ່ອນ ໂດຍປົກກະຕິແລ້ວຂໍ້ມູນຈະຖືກໃຫ້ເປັນລະບົບ.

- “ ຄູ” ແມ່ນຜູ້ທີ່ສອນ. ການກະທໍາທີ່ຜ່ານມາຂອງ“ ສອນ” ແມ່ນ“ ໄດ້ສອນ.”
- ເມື່ອພຣະເຢຊູ ກໍາລັງສັ່ງສອນພຣະອົງ ກໍາລັງອະທິບາຍສິ່ງຕ່າງໆກ່ຽວກັບພຣະເຈົ້າແລະລາຊະອານາຈັກຂອງພຣະອົງ.
- ສາວົກຂອງພຣະເຢຊູເຈົ້າເອີ້ນພຣະອົງວ່າ "ອາຈານ" ເຊິ່ງເປັນການໃຫ້ກຽດເຖິງຄົນທີ່ກ່າວເຖິງພຣະຄໍາຂອງພຣະເຈົ້າ.
- ຂໍ້ມູນທີ່ກໍາລັງສອນສາມາດສອນໃຫ້ເຫັນເປັນຄໍາເວົ້າຫຼືການເວົ້າໄດ້.
- ຄໍາວ່າ "ຫລັກການສອນ"
  ອ້າງເຖິງຄໍາສອນຕ່າງໆຈາກພຣະເຈົ້າໃນເລື່ອງຂອງພຣະອົງເອງລວມທັ້ງຂໍ້ປະຕິບັດຂອງພຣະເຈົ້າໃນການດໍາເນີນຊີວິດຢ່າງໃດສາມາດແປໄດ້ວ່າ"ຄໍາສອນ
- ປະໂຫຍກທີ່ວ່າ "ສິ່ງທີ່ທ່ານໄດ້ຮັບຄໍາສອນມາ" ສາມາດແປວ່າ
  "ສິ່ງທີ່ເຂົາເຫລົ່ານີ້ໄດ້ສອນທ່ານ"ຫຼື"ສິ່ງທີ່ພຣະເຈົ້າໄດ້ສອນທ່ານ"ຂຶ້ນຢູ່ກັບສະຖານະການ.
- ວິທີອື່ນທີ່ຈະແປວ່າ"ສອນ" ສາມາດລວມເຖິງ "ການບອກ" ຫຼື "ການອະທິບາຍ" ຫຼື "ການສອນ".
- ຫລາຍຄັ້ງຄໍານີ້ສາມາດແປໄດ້ວ່າ"ການສອນຜູ້ຄົນເຖິງເລື່ອງລາວຂອງພຣະເຈົ້າ".

## ສະງ່າຜ່າເຜີຍ

### ນິຍາມ

ຄໍາວ່າ "ສະງ່າຜ່າເຜີຍ" ອ້າງເຖິງຄວາມຍິ່ງໃຫຍ່ແລະຄວາມຮຸ່ງເຮືອງ,ຫຼາຍຄັ້ງມັກຈະກ່ຽວຂ້ອງກັບຄຸນສົມບັດຂອງກະສັດ.

- ໃນພຣະຄໍາພີວ່າ "ສະງ່າຜ່າເຜີຍ" ຫຼາຍຄັ້ງມັກຈະກ່າວເຖິງຄວາມຍິ່ງໃຫຍ່ຂອງພຣະເຈົ້າຜູ້ຊຶ່ງເປັນກະສັດຜູ້ຍິ່ງໃຫຍ່ເໜືອຈັກກະວານ.
- ຝ່າລະອອງທຸລີພຣະບາດ ເປັນວິທີເວົ້າກັບກະສັດ.

### ຄໍາແນະນໍາໃນການແປ

- ຄໍານີ້ສາມາດແປເປັນ "ພຣະບາລະມີ" ຫຼື "ໃຕ້ຝ່າລະອອງທຸລີພຣະບາດ."
- "ຝ່າລະອອງທຸລີພຣະບາດ" ສາມາດແປວ່າ "ຄວາມສະງ່າຜ່າເຜີຍ" ຫຼື "ຄວາມມີອໍານາດ"
  ຫຼືໃຊ້ແບບທໍາມະດາໃນການກ່າວກັບຜູ້ປົກຄອງໃນພາສາທີ່ແປນັ້ນ.

## ສະດຸດ

### ນິຍາມ

ຄໍາວ່າ "ສະດຸດ" ໝາຍເຖິງ "ເກືອບລົ້ມ" ເວລາຍ່າງຫຼືແລ່ນ. ປົກກະຕິແລ້ວມັນກ່ຽວຂ້ອງກັບການຫຼອກລວງສິ່ງໃດສິ່ງ ໜຶ່ງ.

- ຄໍາປຽບທຽບຂອງຄໍາວ່າ, "ທີ່ຈະສະດຸດ" ສາມາດຫມາຍຄວາມວ່າ "ເຮັດບາບ" ຫຼື "ລົ້ມລົງ" ໃນການເຊື່ອຖື.
- ຄໍາສັບນີ້ໝາຍຄວາມໄດ້ອີກວ່າ ການລັ່ງເລຫລືສະແດງຄວາມອ່ອນແອໃນເວລາທີ່ຕໍ່ສູ້ຫຼືໃນເວລາທີ່ຖືກຂົ່ມເຫັງຫລືຖືກລົງໂທດ.

### ຄໍາແນະນໍາໃນການແປ

- ໃນສະຖານະການທີ່ໃຊ້ຄໍາວ່າ "ສະດຸດ" ໝາຍເຖິງການເດີນທາງດ້ານຮ່າງກາຍຜ່ານສິ່ງໃດສິ່ງໜຶ່ງທີ່ເຮັດໃຫ້ "ເກືອບລົ້ມລົງ" ຫຼື
  "ຈົບການເດີນທາງ".
- ສໍາລັບການນໍາໃຊ້ການປຽບທຽບຄວາມໝາຍໃນພາສາທີ່ກໍາລັງແປ "ສະດຸດ" ສາມາດແປວ່າ "ບາບ" ຫລື "ຫຼົ້ມແຫຼວ" ຫລື
  "ຢຸດເຊື່ອ" ຫລື "ອ່ອນແອ", ຂຶ້ນ"ຢູ່ກັບ [ບາບ].


generated on Thu Jul 10 08:45:04 2025

## ສະດຸກາຍ

### ນິຍາມ

ພວກສະດຸກາຍເປັນກຸ່ມທີ່ກ່ຽວຂ້ອງກັບການເມືອງຂອງພວກປະໂລຫິດຊາວຢິວໃນຊ່ວງເວລາຂອງພຣະເຢຊູຄຣິດເຈົ້າ
ເປັນຜູ້ສະໜັບສະໜຸນການປົກຄອງຂອງຊາວໂຣມແລະບໍ່ເຊື່ອໃນການເປັນຄືນມາຈາກຕາຍ

- ພວກສະດຸກາຍຫຼາຍຄົນເປັນຄົນຮັ່ງມີ ເປັນຊາວຢິວຊັ້ນສູງແລະເປັນຜູ້ທີ່ດຳລົງຕຳແໜ່ງຜູ້ນຳທີ່ມີອຳນາດ ຕົວຢ່າງເຊັ່ນ ຫົວໜ້າປະໂລຫິດແລະມະຫາປະໂລຫິດ.
- ໜ້າທີ່ຂອງພວກສະດຸກາຍ ລວມເຖິງການດູແລຮັກສາບໍລິເວນພຣະວິຫານແລະວຽກງານໃນໜ້າທີ່ປະໂລຫິດ ຕົວຢ່າງເຊັ່ນ ການຖະຫວາຍເຄື່ອງບູຊາ.
- ພວກສະດຸກາຍແລະຟາຣີຊາຍມີຍຶດທີ່ຜິນຢ່າງຫຼວງຫຼາຍຕໍ່ຜູ້ນຳຊາວໂລມໃນການຄຶງພຣະເຢຊູ.
- ພຣະເຢຊູໄດ້ເວົ້າຕໍ່ຕ້ານພວກຜູ້ນຳທາງສາດສະໜາສອງກຸ່ມນີ້ເພາະຄວາມເຫັນແກ່ຕົວແລະການໜ້າຊື່ໃຈຄົດຂອງພວກເຂົາ.

## ສະຖານທີ່ສັກສິດ

### ນິຍາມ

ຄຳວ່າ “ສະຖານທີ່ສັກສິດ” ຕາມຕົວອັກສອນມີຄວາມໝາຍວ່າ ”ສະຖານທີ່ບໍລິສຸດ” ແລະອ້າງເຖິງສະຖານທີ
ທີ່ພຣະເຈົ້າໄດ້ທຳໃຫ້ເປັນທີ່ສັກສິດແລະບໍລິສຸດ ແລະຍັງສາມາດອ້າງເຖິງສະຖານທີ ທີ່ມີການຄຸ້ມຄອງແລະມີຄວາມປອດໄພ.

- ໃນພັນທະສັນຍາເດີມ ຄຳວ່າ ”ສະຖານທີ່ສັກສິດ” ຖືກໃຊ້ຫຼາຍເພື່ອອ້າງເຖິງຫໍເຕັ້ນຫຼືອາຄານພຣະວິຫານທີ ”ສະຖານທີ່ສັກສິດ” ແລະ ”ສະຖານທີ່ສັກສິດທີ່ສຸດ” ຕ່າງຢູ່
- ພຣະເຈົ້າໄດ້ອ້າງສະຖານທີ່ສັກສິດດັ່ງເປັນສະຖານທີ່ຊຶ່ງພຣະອົງສະຖິດໃນທ່າມກາງປະຊາກອນຂອງພຣະອົງຄືພວກອິດສະຣາເອນ.
- ພຣະອົງໄດ້ຊົງເອີ້ນພຣະອົງວ່າ ”ສະຖານທີ່ສັກສິດ” ຫລືເປັນທີ່ປອດໄພສຳລັບປະຊາຊົນທີ່ພວກເຂົາສາມາດຫາການປົກປ້ອງຮັກສາໄດ້.

### ຄຳແນະນຳໃນການແປ

- ຄຳນີ້ມີຄວາມໝາຍທັມມະດາຂອງ ”ສະຖານທີ່ສັກສິດ” ຫລື ”ສະຖານທີ່ຖືກແຍກອອກມາ”.
- ຂຶ້ນຢູ່ກັບກໍລະນີ ຄຳວ່າ ”ສະຖານສັກສິດ” ສາມາດແປວ່າ ”ສະຖານທີ່ສັກສິດ” ຫລື "ອາຄານສັກສິດ” ຫລື ”ສະຖານທີ່ຄວາມສັກສິດຂອງພຣະເຈົ້າສະຖິດຢູ່” ຫລື
”ສະຖານທີ່ສັກສິດຂອງການປົກປ້ກຮັກສາ”ຫລື”ສະຖານທີ່ສັກສິດແຫ່ງຄວາມປອດໄພ”.
- ຖ້ອຍຄຳທີ່ວ່າ ”ເງິນເຊກຽນຂອງສະຖານສັກສິດ” ສາມາດແປວ່າ ”ຊະນິດຂອງເງິນເຊກຽນທີ່ໄດ້ໃຫ້ສຳລັບຫໍເຕັ້ນ” ຫລື ”ເງິນເຊກຽນທີ່ໄດ້ໃຊ້ເປັນເໝືອນເງິນພາສີເພື່ອບຳລຸງພຣະວິຫານ”.
- ຫມາຍເຫດ ຈົ່ງລະວັງວ່າການແປຄຳນີ້ຈະບໍ່ອ້າງເຖິງຫ້ອງນະມັດສະການໃນຄຣິດຕະຈັກໃຫມ່.

## ສະຖານສູງ

### ນິຍາມ

ຄຳວ່າ "ສະຖານສູງ"ອ້າງເຖິງແທ່ນບູຊາແລະປູສະນີຍະສະຖານທີ່ສຳຄັນສຳລັບນະມັດສະການຮູບເຄົ່ນລົບ. ສະຖານສູງເຫລົ່ານີ້ ຈະຖືກສ້າງຂຶ້ນທີ່ສູງ, ເຊັ່ນເທິງຫຸບເຂົາ ຫລື ພູເຂົາ.

- ກະສັດຫລາຍພຣະອົງໄດ້ເຮັດຄວາມບາບຕໍ່ພຣະເຈົ້າໂດຍການສ້າງແທ່ນບູຊາແກ່ພະທຽມເທັດໃນສະຖານສູງເຫລົ່ານີ ເຮັດໃຫ້ຜູ້ຄົນມີສ່ວນຮ່ວມຢ່າງຫລວງຫລາຍໃນການນະມັດສະການຮູບເຄົ່າລົບ.
- ເມື່ອກະສັດທີ່ຢຳເກງພຣະເຈົ້າໄດ້ເຂົ້າມາປົກຄອງໃນອິດສະຣາເອນຫລືຢູດາ, ທ່ານມັກຈະທຳລາຍສະຖານສູງແລະລົ້ມເລີກການນະມັດສະການຮູບເຄົ່າລົບເຫລົ່ານີ.
- ຢ່າງໃດກໍຕາມ, ກະສັດທີ່ດີບາງຄົນໄດ້ປະມາດແລະບໍ່ໄດ້ທຳລາຍສະຖານສູງ, ຊຶ່ງເປັນຜົນເຮັດໃຫ້ປະເທດອິດສະຣາເອນທັງປະເທດຍັງຄົງນະມັດການຮູບເຄົ່າລົບຕໍ່ໄປ.

### ຄຳແນະນຳໃນການແປ

- ວິທີການອື່ນທີ່ຈະແປຄຳນີ້ສາມາດລວມເຖິງ, "ສະຖານທີ່ຖືກຍົກຂຶ້ນສຳລັບການນະມັດສະການຮູບເຄົ່າລົບ" ຫລື "ປູສະນີຍະສະຖານຮູບເຄົ່າລົບເທິງພູເຂົາ." ຫລື "ເນີນແທ່ນບູຊາຮູບເຄົ່າລົບ."
- ໃຫ້ແນ່ໃຈວ່າຄຳນີ້ອ້າງເຖິງແທ່ນບູຊາຮູບເຄົ່າລົບ ບໍ່ແມ່ນພຽງແຕ່ສະຖານສູງທີ່ແທ່ນບູຊາຕັ້ງຢູ່.


generated on Thu Jul 10 08:45:04 2025

## ສະບານ, ການສະບານ

### ນິຍາມ

ຄຳວ່າ "ສະບານ" ແລະ "ການສະບານ" ກ່າວເຖິງ ການກ່າວຫຼື ຄວາມໝັ້ນໃຈວ່າບາງຢ່າງເປັນຄວາມຈິງຫຼືແນ່ນອນ ຫຼືມີຄຸນຄ່າຫນ້າເຊື່ອຖື.

- ໃນພັນທະສັນຍາເດີມ ພຣະເຈົ້າກ່າວກັບປະຊາຊົນຂອງພຣະອົງ

ວ່າຈະ"ຢືນຢັນ" ພັນທະສັນຍາຂອງພຣະອົງກັບພວກເຂົາ ນີ ຫມາຍເຖິງວ່າພຣະອົງກໍາລັງກ່າວວ່າພຣະອົງຈະຮັກສາຄໍາສັນຍາ
ທີ່ພຣະອົງຊົງທໍາໄວ້ໃນພັນທະສັນຍາ.

- ເມື່ອກະສັດໄດ້ "ຢືນຢັນ" ຫມາຍຄວາມວ່າ ການຕັດສິນໃຈທີ່ຈະ

ທໍາໃຫ້ພຣະອົງເປັນກະສັດນັ້ນ ໄດ້ຮັບການເຫັນດ້ວຍແລະສະ ໜັບສະໜຸນໂດຍປະຊາຊົນ.

- ເພື່ອຢືນຢັນວ່າ ສິ່ງທີ່ບາງຄົນໄດ້ຂຽນ ຫມາຍຄວາມວ່າ ທີ່ບອກວ່າສິ່ງທີ່ໄດ້ຂຽນນັ້ນເປັນຄວາມຈິງ.
- "ການສະບານຕົນ" ຂອງພຣະກິດຕິຄຸນໝາຍຄວາມວ່າ
  ການສອນປະຊາຊົນກ່ຽວກັບຂ່າວດີຂອງພຣະເຢຊູໃນທາງທີ່ສະແດງວ່າເປັນຄວາມຈິງ.
- ການໃຫ້ຄໍາສາບານ "ທີ່ເປັນການຢືນຢັນ" ຫມາຍຄວາມວ່າສິ່ງນັ້ນສົກສິດຫຼືສາບານວ່າສິ່ງນັ້ນເປັນຄວາມຈິງຫຼືໜ້າເຊື່ອຖື
- ວິທີແປຄໍາວ່າ "ສະບານ" ຄວນຈະລວມ" ລະບຸວ່າເປັນຄວາມຈິງ" ຫຼື " ພິສູດວ່າຫນ້າເຊື່ອຖື " ຫຼື " ເຫັນດ້ວຍ" ຫຼື " ຮັບຮອງ"

ຫຼື "ສັນຍາ" ຊຶ່ງຈະຂຶ້ນຢູ່ກັບຖ້ອຍຄໍານັ້ນໆ.

## ສະພາ

### ນິຍາມ

ສະພາເປັນກຸ່ມຄົນທີ່ພົບປະຫາລື, ໃຫ້ຄໍາແນະນໍາ, ແລະຕັດສິນໃຈກ່ຽວກັບເລື່ອງທີ່ສໍາຄັນ.

- ສະພາຈັດໂດຍປົກກະຕິຢ່າງເປັນທາງການແລະຂ້ອນຂ້າງຖາວອນສໍາລັບວັດຖຸ,
  ປະສົງສະເພາະເຊັ່ນການຕັດສິນໃຈກ່ຽວກັບເລື່ອງທາງກົດໝາຍ.
- "ສະພາຍິວ" ໃນນະຄອນເຢຣູຊາເລັມເປັນທີ່ຮູ້ຈັກກັນໃນຊື່ "ແຊນຮິດຣິນ," ມີສາມາຊິກ 70 ຄົນ, ຊຶ່ງລວມເຖິງຜູ້ນໍາຊາວຍິວເຊັ່ນ
  ພວກຫົວໜ້າປະໂຣຫິດ, ຜູ້ປົກຄອງ, ທໍາມະຈານ, ຟາຣີຊາຍ, ແລະສະດູກາຍ
  ພວກນີ້ມີການປະຊຸມຢ່າງສະໝ່ໍາສະເໝີເພື່ອຈະຕັດສິນເລື່ອງກ່ຽວກັບບັນຍັດຂອງຍິວ.
  ສະພານີ້ເປັນສະພາຜູ້ນໍາສາສະໜາຜູ້ທີ່ຈັບພຣະເຢຊູມາສອບສວນ ແລະໄດ້ຕັດສິນວ່າ ພຣະເຢຊູຄວນຖືກປະຫານ.
- ມີສະພາຍິວນ້ອຍໆ ໃນເມືອງຕ່າງໆ
- ອັກຄະສາວົກໂປໂລ ຖືກນໍາຕົວມາຢູ່ຕໍ່ໜ້າສະພາໂຣມເມື່ອທ່ານຖືກຈັບເພາະການສອນພຣະກິດຕິຄຸນ.
- ຄໍາວ່າ "ສະພາ" ສາມາດແປວ່າ "ການປະຊຸມທາງກົດໝາຍ" ຫຼື "ການປະຊຸມທາງການເມືອງ." ທັ້ງນີ້ຂຶ້ນຢູ່ກັບກໍລະນີນັ້ນໆ
- ໃນສະພາ "ໝາຍເຖິງການເຂົ້າຮ່ວມການປະຊຸມພິເສດເພື່ອຕັດສິນໃຈບາງຢ່າງ.
- ໂປດຮູ້ວ່ານີ້ເປັນຄໍາທີ່ຕ່າງຈາກຄໍາວ່າ "ການໃຫ້ຄໍາປຶກສາ," ຊຶ່ງ

ໝາຍເຖິງ, "ຄໍາແນະນໍາທີ່ສະຫຼາດ."

## ສະມາຊິກ

### ນິຍາມ

ຄໍາວ່າ "ສະມາຊິກ" ແມ່ນບົ່ງບອກເຖິງ ພາກສ່ວນໜຶ່ງຂອງຮ່າງກາຍທັງໝົດ ຫລື ຂອງກຸ່ມໃດໜຶ່ງ.

- ໃນພຣະຄໍາພີໃໝ່ ໄດ້ອະທິບາຍວ່າ ຄຣິດສະຕຽນ ແມ່ນ "ສະມາຊິກ" ໃນພຣະກາຍຂອງພຣະຄຣິດ. ຜູ້ທີ່ເຊື່ອໃນພຣະຄຣິດ
  ແມ່ນສ່ວນໜຶ່ງຂອງກຸ່ມ ທີ່ມີສະມາຊິກຢູ່ນໍາກັນຫລາຍຄົນ.
- ພຣະເຢຊູຄຣິດ ເປັນ "ຫົວ" ຂອງຮ່າງກາຍ ແລະຜູ້ທີ່ເຊື່ອແຕ່ລະຄົນເປັນພາກສ່ວນໜຶ່ງ ຫລືເປັນສະມາຊິກໃນຮ່າງກາຍນັ້ນ.
  ພຣະວິນຍານບໍລິສຸດເຈົ້າ ໄດ້ປະທານໜ້າທີ່ພິເສດໃຫ້ສະມາຊິກທຸກຄົນໃນຮ່າງກາຍ ເພື່ອໃຫ້ທັ້ງໝົດຂອງຮ່າງກາຍນັ້ນ ເຮັດວຽກໄດ້ດີ.
- ລວມທັ້ງບຸກຄົນໃດໜຶ່ງທີ່ມີສ່ວນຮ່ວມໃນກຸ່ມຕ່າງໆ ເຊັ່ນ ສະພາຂອງຊາວຍິວ ແລະ ກຸ່ມຟາຣີຊາຍ ທັ້ງໝົດຖືກເອີ້ນວ່າເປັນ "ສະມາຊິກ"
  ຂອງກຸ່ມເຫລົ່ານີ້.


generated on Thu Jul 10 08:45:04 2025

## ສະມາເຣຍ ຊາວສະມາເຣຍ

### ຂໍ້ເທັດຈິງ

ສະມາເຣຍ
ເປັນຊື່ເມືອງແລະບໍລິເວນໂດຍຮອບໃນພາກເໜືອຂອງອິດສະຣາເອນແຖວນີ້ຕັ້ງຢູ່ລະຫວ່າງທີຣາບແຫ່ງຊາລອນທາງຕາເວັນຕົກແລະແມ່ນ້ຳຈໍແດນທາງຕາເວັນອອກ.

- ໃນຜັນທະສັນຍາເດີມ ເມືອງສະມາເຣຍເປັນເມືອງຫຼວງຂອງອານາຈັກທາງເໜືອຂອງອິດສະຣາເອນ
  ຕໍ່ມາແຖວທີ່ຢູ່ໂດຍຮອບກໍຖືກເອີ້ນວ່າສະມາເຣຍດ້ວຍ.
- ເມືອຊາວອັດຊີເຣຍໄດ້ໄຊຊະນະອານາຈັກທາງເໜືອຂອງອິດສະຣາເອນແລ້ວພວກເຂົາໄດ້ຍຶດຄອງເມືອງສະມາເຣຍແລະບັງຄັບຊາວອິດສະຣາເອນສ່ວນຫ
- ຊາວອັດຊີເຣຍໄດ້ນຳຊາວຕ່າງຊາດຫລາຍຄົນເຂົ້າມາອາໃສຢູ່ໃນແຖວສະມາເຣຍເພື່ອເຂົ້າໄປແທນຊາວອິດສະຣາເອນທີ່ຖືກຍ້າຍອອກໄປ.
- ຊາວອິດສະຣາເອນສ່ວນນຶ່ງທີ່ເຫຼືອຢູ່ໃນແຖວສະມາເຣຍໄດ້ແຕ່ງງານກັບຊາວຕ່າງຊາດທີ່ໄດ້ຍ້າຍເຂົ້າມາຢູ່ໃນທີ່ນັ້ນ
  ແລະລູກຫຼານຂອງພວກເຂົາຖືກເອີ້ນວ່າຊາວສະມາເຣຍ.
- ຊາວຢິວເວົ້າດູຖູກຊາວສະມາເຣຍເພາະພວກເຂົາເປັນຊາວຢິວພຽງແຕ່ສ່ວນດຽວແລະເພາະວ່າບັນພະບຸລຸດຂອງພວກເຂົາໄດ້ນະມັດສະການພະທຽມ.
- ໃນຍຸກພັນທະສັນຍາໃໝ່ແຖວສະມາເຣຍໄດ້ຖືກກັ້ນເຂດແດນໂດຍແຖວຄາລີເລທາງເໜືອແລະແຖວຢູ່ດາທາງຕອນໃຕ້.

## ສະລາກ, ການຈັບສະລາກ

### ນິຍາມ

" ສະຫລາກ " ຄືວັດຖຸທີ່ມີເຄື່ອງໝາຍເຊິ່ງຫວ່ານຂຶ້ນ ຫລື ຈັບຂຶ້ນມາຈາກວັດຖຸອື່ນທີ່ຄ້າຍຄືກັນເພື່ອເປັນວິທີໃນການເລືອກ ຫລື ຕັດສິນໃຈ ຄຳວ່າ
" ການຈັບສະຫລາກ " ອ້າງເຖິງການຫວ່ານວັດຖຸທີ່ເຮັດເຄື່ອງໝາຍລົງໄປທີ່ພື້ນ ຫຼື ຜິວພື້ນອື່ນໆ

- ຫລາຍເທື່ອສະຫລາກຄືກ້ອນຫີນນ້ອຍໆ ທີ່ເຮັດເຄື່ອງໝາຍ ຫລື ເສດຂອງໝໍ້ທີ່ແຕກຫັກ ຫລື
  ການກິ້ງກ້ອນຫີນກ້ອນນ້ອຍທີ່ມີເຄື່ອງຫມາຍ ຫລື ເສດຊິ້ນສ່ວນທີ່ແຕກຫມໍ້ທີ່ແຕກ
  ຄົນທີ່ເສດຊິ້ນສ່ວນທີ່ມີເຄື່ອງຫມາຍກິ້ງໄປຫາກ່ໍຈະເປັນຄົນທີ່ຖືກເລືອກ

- ໃນບາງວັດທະນະທຳ " ການຈັບສະຫລາກ " ຫລື ສະຫລາກ " ຈັບອອກ " ຈະໃຊ້ຊໍເຝືອງເຂົ້າເພື່ອການຈັບສະຫລາກ
  ບາງຄົນຖືເຝືອງເຂົ້າເພື່ອຈະບໍ່ມີໃຜແນມເຫັນວ່າພວກມັນຍາວເທົ່າໃດ ແຕ່ລະຄົນກ່ໍຈັບເອົາເຝືອງເຂົ້າຄົນລະຫນຶ່ງອັນຂຶ້ນມາ
  ໃຜທີ່ຈັບໄດ້ອັນທີ່ຍາວທີ່ສຸດ (ຫລືສັ້ນທີ່ສຸດ) ກ່ໍຈະເປັນຄົນທີ່ຖືກເລືອກ.

- ການຈັບສະຫລາກຖືກໃຊ້ໂດຍຄົນອິດສະເອນເພື່ອຫາວ່າພຣະເຈົ້າຕ້ອງການໃຫ້ພວກເຂົາເຮັດຫ້ຍງ.

- ຢ່າງເຊັ່ນໃນສະໄຫມຂອງເຊຄາລີຢາ ແລະ
  ເອສີຊາເບດເປັນການໃຊ້ການເລືອກວ່າປະໂລຫິດຄົນໃດທີ່ຈະເຮັດຫນ້າທີ່ພິເສດໃນພະວິຫານທີ່ຈະຖະຫວາຍເຄື່ອງບູຊາ.

- ພວກທະຫານທີ່ຄຶງພຣະເຢຊູໄດ້ຫວ່ານສະຫລາກເພື່ອຕັດສິນວ່າໃຜຈະໄດ້ເສື້ອຄຸມຂອງພຣະເຢຊູໄປເປັນເຈົ້າຂອງ.

- ວະລີ " ການຈັບສະຫລາກ " ສາມາດແປວ່າ ການຫວ່ານຈໍານວນຫລາຍ " ຫລືການວາດພາບ " ຫລື " ກິ້ງສະຫລາກ "
  ຕ້ອງແນ່ໃຈວ່າຈະບໍ່ໃຊ້ຄຳທີ່ເຮັດໃຫ້ສະຫລາກເປັນຄືກັນກັບຖືກໂຍນໄລຍະໄກ.

- ຂຶ້ນຢູ່ກັບບໍ່ດ ຄຳວ່າ " ສະຫລາກ " ສາມາດແປວ່າ " ກ້ອນຫີນທີ່ຖືກເຮັດເຄື່ອງຫມາຍໄວ້ " ຫລື " ເສດຫມໍ້ " ຫລື " ໄມ້ " ຫລື "
  ເສດເຝືອງເຂົ້າ"

- ຖ້າການຕັດສິນໃຈທີ່ກະທຳໂດຍການ " ຈັບສະຫລາກ " ນີ້ສາມາດແປວ່າໂດຍການຈັບ ( ຫລືການໂຍນ ) ສະຫລາກ. "

-

## ສະຫງ່າຣາສີ

### ນິຍາມ

ຄຳວ່າ "ສະຫງ່າຣາສີ" ອ້າງເຖິງຄວາມງົດງາມທີ່ສຸດແລະຄວາມຫລູຫລາທີ່ມັກກ່ຽວຂ້ອງກັບຄວາມຮັ່ງມີແລະອຸບລັກສະນະອັນງົດງາມ.

- ຄຳວ່າສະຫງ່າຣາສີ ຫລາຍເທື່ອຈະໃຊ້ອະທິບາຍເຖິງຄວາມຮັ່ງມີທີ່ກະສັດຊົງມີ,
  ຫລືວິທີການທີ່ທ່ານເບິ່ງໃນຂອງແພງໆແລະຄວາມງາມໃນເສື້ອຜ້າອາພອນຫລູຫລາຂອງເຂົາ.
- ຄຳວ່າ "ສຫງ່າຣາສີ" ຍັງສາມາດອະທິບາຍເຖິງຄວາມງາມຂອງຕົ້ນໄມ້ ພູເຂົາ ຫລືສິ່ງຕ່າງໆ ທີ່ພຣະເຈົ້າຊົງສ້າງໄວ້.


generated on Thu Jul 10 08:45:04 2025

- ມີບາງເມືອງທີ່ກ່າວກັນວ່າມີຄວາມສຫງ່າງາມອ້າງເຖິງແຫລ່ງຊັບພະຍາກອນທໍາມະຊາດອາຄານ, ແລະຖະໜົນທີ່ຊັບຊ້ອນແລະຄວາມຮັ່ງມີຂອງປະຊາຊົນທັງໝົດເຖິງເສື້ອຜ້າລາຄາແພງ, ຄໍາແລະເງິນ.
- ຂຶ້ນຢູ່ກັບສະຖານະການ, ຄໍານີ້ສາມາດແປໄດ້ວ່າ, "ຄວາມງາມອັນຍອດຍ້ຽມ" ຫລື "ຄວາມສຫງ່າງາມສູງສຸດ" ຫລື "ຄວາມຍິ່ງໃຫຍ່ດັ່ງກະສັດ."

## ສະຫວັນ, ທ້ອງຟ້າ, ທ້ອງຟ້າທັງໝົດ, ດັ່ງສະຫວັນ

### ນິຍາມ

ຄໍາທີ່ແປວ່າ "ສະຫວັນ" ອ້າງເຖິງສະຖານທີ່ທີ່ພຣະເຈົ້າປະທັບຢູ່ . ຄໍາດຽວກັນອາດຈະໝາຍເຖິງ "ທ້ອງຟ້າ," ຂຶ້ນຢູ່ບໍລິບົດ.

- ຄໍາວ່າ "ທ້ອງຟ້າທັງໝົດ" ອ້າງເຖິງທຸກສິ່ງທີ່ເຮົາເຫັນເໜືອແຜ່ນດິນໂລກ, ລວມເຖິງດວງອາທິດ ດວງຈັນ, ແລະດວງດາວ, ເຊິ່ງທັງໝົດລວມເຖິງສິ່ງຕ່າງໆໃນທ້ອງຟ້າ. ເຊັ່ນ ດາວເຄາະທີ່ຢູ່ຫ່າງອອກໄປ, ເຊິ່ງເຮົາບໍ່ສາມາດເບິ່ງເຫັນໄດ້ໂດຍກົງຈາກໂລກ.
- ຄໍາວ່າ "ທ້ອງຟ້າ" ອ້າງເຖິງພື້ນທີ່ກວ້າງໃຫຍ່ໄພສານສີຟ້າເໝືອແຜ່ນດິນໂລກທີ່ມີເມກແລະອາກາດທີ່ເຮົາຫາຍໃຈເຂົ້າໄປ. ດວງອາທິດແລະດວງຈັນມັກຈະຖືກກ່າວເຖິງວ່າຢູ່ "ເທິງທ້ອງຟ້າ."
- ໃນບາງບໍລິບົດໃນພຣະຄໍາພີຄໍາວ່າ, "ສະຫວັນ" ອາດໝາຍເຖິງທ້ອງຟ້າຫລືສະຖານທີ່ທີ່ພຣະເຈົ້າປະທັບຢູ່.
- ເມື່ອ "ສະຫວັນ" ຖືກໃຊ້ໃນເຊິງປຽບທຽບ, ນັ້ນເປັນວິທີທີ່ກ່າວເຖິງພຣະເຈົ້າ. ຍົກຕົວຢ່າງເຊັ່ນ, ເມື່ອມັດທາຍຂຽນກ່ຽວກັບ "ອານາຈັກແຫ່ງສະຫວັນ" ທ່ານກໍາລັງອ້າງເຖິງອານາຈັກຂອງພຣະເຈົ້າ.

### ຄໍາແນະນໍາໃນການແປ

- ເມື່ອ "ສະຫວັນ" ຖືກໃຊ້ໃນເຊິງປຽບທຽບ, ສາມາດແປໄດ້ວ່າ"ພຣະເຈົ້າ."
- ສໍາລັບ "ອານາຈັກແຫ່ງສະຫວັນ" ໃນໜັງສືມັດທາຍນັ້ນ, ເປັນການດີທີ່ສຸດທີ່ຈະຖືຮັກສາຄໍາວ່າ "ສະຫວັນ" ໄວ້ເນື່ອງຈາກນີ້ເປັນລັກສະນະສະເພາະຂອງພຣະກິດຕິຄຸນມັດທາຍ.
- ຄໍາວ່າ "ສະຫວັນ" ຫລື "ດວງດາວໃນທ້ອງຟ້າ" ສາມາດແປໄດ້ວ່າ, "ດວງອາທິດ ດວງຈັນ ແລະດວງດາວ" ຫລື "ດວງດາວທັງໝົດໃນຈັກກະວານ."
- ວະລີ, "ດວງດາວທັງຫລາຍແຫ່ງສະຫວັນ" ສາມາດແປໄດ້ວ່າ "ດວງດາວທັງຫລາຍໃນທ້ອງຟ້າ" ຫລື "ດວງດາວທັງຫລາຍໃນທາງຊ້າງເຜືອກ" ຫລື "ດວງດາວທັງຫລາຍໃນຈັກກະວານ."

## ສະຫຼາດ, ຄວາມສະຫຼາດ

### ນິຍາມ

ຄໍາວ່າ "ສະຫຼາດ" ອະທິບາຍເຖິງຄົນທີ່ເຂົ້າໃຈວ່າແມ່ນຫຍັງເປັນສິ່ງທີ່ຖືກຕ້ອງແລະຄຸນນະທໍາພໍທີ່ຈະທໍາໃນສິ່ງນັ້ນ "ຄວາມສະຫຼາດ" ຄືຄວາມເຂົ້າໃຈແລະການປະຕິບັດໃນສິ່ງທີ່ເປັນຄວາມຈິງແລະຖືກຕ້ອງຕາມຫຼັກສິນລະທໍາ.

- ການເປັນຄົນສະຫຼາດຮວມເຖິງຄວາມສາມາດໃນການຕັດສິນໃຈທີ່ດີໂດຍສະເພາະຢ່າງຍິ່ງໃນການເລືອກທີ່ຈະທໍາໃນສິ່ງທີ່ເປັນທີ່ພໍພຣະໄທຂອງພຣະເຈົ້າ.
- ໃນພຣະຄໍາພີ ຄໍາທີ່ວ່າ "ຄວາມສະຫຼາດຝ່າຍໂລກ " ເປັນວິທີທີ່ປຽບໃນການອ້າງອີງເຖິງສິ່ງທີ່ຜູ້ຄົນໃນໂລກນີ້ຄິດວ່າສະຫຼາດ ແຕ່ທີ່ຈິງແລ້ວເປັນສິ່ງທີ່ໂງ່.
- ຄົນຈະກາຍເປັນຄົນສະຫຼາດໂດຍການເຊື່ອຟັງພຣະເຈົ້າແລະເຊື່ອຟັງພຣະປະສົງຂອງພຣະອົງດ້ວຍຄວາມຖ່ອມໃຈ.
- ຄົນສະຫຼາດຈະສະແດງເຖິງຜົນຂອງພຣະວິນຍານບໍຣິສຸດໃນຊີວິດຂອງເຂົາເຊັ່ນ ຄວາມສຸກ, ຄວາມເມດຕາ, ຄວາມຮັກ, ແລະຄວາມອົດທົນ.

### ຄໍາແນະນໍາໃນການແປ

- ຂຶ້ນຢູ່ກັບບໍລິສັດ ໃນວິທີອື່ນໃນການແປ "ສະຫຼາດ" ອາດຈະຮວມເຖິງ "ການເຊື່ອຟັງເຈົ້າ" ຫຼື "ມີເຫດຜົນແລະເຊື່ອຟັງ" ຫຼື "ການຢໍາເກງພຣະເຈົ້າ."
- "ສະຕິປັນຍາ" ອາດຈະແປໂດຍຄໍາຫຼືຄໍາທີ່ແປວ່າ "ໃຊ້ຊີວິດທີ່ສະຫຼາດ" ຫລື "ດໍາເນີນຊີວິດທີ່ເໝາະສົມໃນການເຊື່ອຟັງ" ຫຼື "ການຕິດສິນຄວາມທີ່ດີ"
- ທາງທີ່ດີທີ່ສຸດໃນການແປ "ສະຫຼາດ" ແລະ "ສະຕິປັນຍາ" ໃນແບບທີ່ມັນເປັນຄໍາທີ່ແຕກຕ່າງຈາກຄໍາອື່ນໆ ເຊັ່ນຄໍາວ່າຊອບທໍາຫຼື ເຊື່ອຟັງເປັນຕົ້ນ.


generated on Thu Jul 10 08:45:04 2025

## ສະອາດ, ຊໍາລະໃຫ້ສະອາດ

### ນິຍາມ

ຄໍາວ່າ "ສະອາດ" ມີຄວາມໝາຍຕາມຕົວໝັ້ງສືວ່າບໍ່ມີຄວາມສົກກະປົກຫຼືມົນທິນໃດໆ. ໃນພຣະຄໍາພີ,
ຄໍານີ້ມັກໃຊ້ເປັນຄໍາປຽບທຽບທີ່ໝາຍເຖິງ, "ເຮັດໃຫ້ບໍຣິສຸດ," "ບໍຣິສຸດ," ຫຼື "ປາສະຈາກບາບ."

- "ການສໍາລະໃຫ້ສະອາດ" ເປັນກະບວນການຂອງການເຮັດໃຫ້ສິ່ງໃດສິ່ງໜຶ່ງ "ສະອາດ." ຄໍານີ້ສາມາດແປໄດ້ວ່າ "ຊໍາລະລ້າງ"

ຫຼື "ເຮັດໃຫ້ບໍຣິສຸດ."

- ໃນພັນທະສັນຍາເດີມ, ພຣະເຈົ້າໄດ້ຊົງບອກຊົນຊາດອິດສະຣາເອນວ່າສັດຊະນິດໃດທີ່ຊີ້ສະເພາະເຈາະຈົງວ່າເປັນສັດທີ່ "ສະອາດ" ທີ່ໃຊ້ຖວາຍບູຊາແລະສັດຊະນິດໃດທີ່ເປັນ "ມົນທິນ." ສັດທີ່ສະອາດເທົ່ານັ້ນທີ່ໄດ້ຮັບອະນຸຍາດໃຫ້ໃຊ້ເພື່ອກິນຫລືຖວາຍບູຊາ. ໃນບໍຣິບົດນີ້, ຄໍາວ່າ "ສະອາດ" ມີຄວາມໝາຍວ່າ ສັດຕົວນັ້ນໄດ້ຮັບການຍອມຮັບຈາກພຣະເຈົ້າເພື່ອໃຊ້ເປັນເຄື່ອງຖວາຍບູຊາ.
- ຄົນທີ່ເປັນໂລກຜິວໜັງບາງຢ່າງຈະເປັນມົນທິນຈົນກວ່າຜິວໜັງຈະໄດ້ຮັບການຮັກສາໃຫ້ດີພໍທີ່ຈະບໍ່ສາມາດແຜ່ເຊື້ອໂລກໄດ້. ຄໍາສອນກ່ຽວກັບການສໍາລະຜິວໜັງໃຫ້ສະອາດທີ່ຕ້ອງເຊືອຟັງ ເພື່ອທີ່ຄົນນັ້ນຈະໄດ້ຮັບການປະກາດວ່າ "ສະອາດ" ອີກຄັ້ງ.
- ບາງຄັ້ງ "ສະອາດ" ໃຊ້ເປັນຄໍາປຽບທຽບທີ່ກ່າວເຖິງ ຄວາມບໍຣິສຸດທາງສິລະທໍາ.

### ຄໍາແນະນໍາໃນການແປ

- ຄໍານີ້ສາມາດແປດ້ວຍຄໍາຫຶ່ວໆໄປ ສໍາລັບຄໍາວ່າ "ສະອາດ"

ຫຼື "ບໍຣິສຸດ"

## ສັກສິດ

### ນິຍາມ

ຄໍາວ່າ ”ສັກສິດ” ອະທິບາຍເຖິງບາງສິ່ງບາງຢ່າງທີ່ກ່ຽວຂ້ອງກັບການນະ
ມັດສະການພຣະເຈົ້າຫຼືການນະມັດສະການພະທຽມຂອງຄົນຕ່າງຊາດ.

- ໃນພັນທະສັນຍາເດີມຫລາຍຄັ້ງເຮົາຈະເຫັນຄໍາວ່າ ”ສັກສິດ” ຈະໃຊ້ໃນອະທິບາຍເສົາຫີນແລະສິ່ງຂອງອື່ນໆທີ່ໃຊ້ໃນການນະມັດສະການພະທຽມນີ້ຍັງແປວ່າ ”ສາດສະໜາ”.
- ”ເພງສັກສິດ” ຫຼື "ດົນຕີສັກສິດ” ໝາຍເຖິງເພງທີ່ຮ້ອງຫຼືຫຼິ້ນຖວາຍກຽດແດ່ພຣະສີລີພຣະເຈົ້າ ນີ້ແປໄດ້ອີກວ່າ ”ດົນຕີສໍາລັບການນະມັດສະການພຣະຢາເວ” ຫຼື ”ເພງເພື່ອສັນເສີນພຣະເຈົ້າ”.
- ຄໍາທີ່ວ່າ ”ຫນ້າທີ່ອັນສັກສິດ” ໝາຍເຖິງ ”ໜ້າທີ່ກ່ຽວກັບສາດສະນາ” ຫຼື ”ພິທີກໍາ” ທີ່ປະໂລຫິດປະຕິບັດເພື່ອນໍາປະຊາຊົນໃນການນະມັດສະການພຣະເຈົ້າ ຍັງອ້າງເຖິງພິທີກໍາທີ່ກະທໍາໂດຍປະໂລຫິດຕ່າງຊາດເພື່ອນະມັດສະການພະທຽມ.

## ສັ່ງຫານ, ຖືກສັ່ງຫານ

### ນິຍາມ

ຄໍາວ່າ "ສັ່ງຫານ" ໝາຍເຖິງການຂ້າຄົນຫລືສັດ ຫລາຍຄັ້ງຄໍານີ້ໝາຍເຖິງການຂ້າຢ່າງໂຫດຮ້າຍຫລືໃນທາງທາລຸນກໍາ.

- ເມື່ອອ້າງເຖິງສັດຫລືຄົນຈໍານວນຫລາຍຄໍາວ່າ"ການຂ້າຢ່າງທາລຸນນະກໍາ" ເປັນອີກຄໍາໜຶ່ງທີ່ຖືກໃຊ້ຫລາຍເຊັ່ນກັນ.
- ຄໍາວ່າ "ຂ້າ" ສາມາດໃຊ້ໃນການແປໃນຄໍານີ້ໄດ້ເຊັ່ນກັນ.
- ໃນປະໂຫຍກທີ່ວ່າ "ຜູ້ທີ່ຖືກເຂັ່ນຂ້າ" ສາມາດແປໄດ້ວ່າ"ປະຊາຊົນທີ່ຖືກເຂັ່ນຂ້າ"ຫລື "ຄົນຫລວງຫລາຍທີ່ຖືກຂ້າ."


generated on Thu Jul 10 08:45:04 2025

## ສັດຊື, ຄວາມສັດຊື

### ນິຍາມ

"ສັດຊື" ຕໍພຣະເຈົ້າໝາຍເຖິງການດໍາເນີນຊີວິດຢ່າງຕໍເນື່ອງຕາມຄໍາສອນຂອງພຣະເຈົ້າ.
ນັ້ນໝາຍເຖິງການຈົ່ງຮັກພັກດີຕໍພຣະອົງໂດຍການເຊື່ອຟັງພຣະອົງ ຄໍາກ່າວ ຫລືເງື່ອນໄຂຂອງການສັດຊືແມ່ນ "ຄວາມສັດຊື."

- ຄົນທີສັດຊືສາມາດໄວ້ວາງໃຈທີຈະຮັກສາສັນຍາຂອງລາວແລະ ເຕັມເຕັ່ມຄວາມຮັບຜິດຊອບຂອງລາວຕໍຄົນອື່ນສະເໝີ.
- ຄົນທີສັດຊືຈະມີຄວາມມຸ່ງໝັ້ນໃນການເຮັດງານ ເຖິງແມ່ນຈະຍາກແລະໃຊ້ເວລາດົນນານ.
- ຄວາມສັດຊືຕໍພຣະເຈົ້າ ແມ່ນການກະທໍາຢ່າງຕໍເນື່ອງໃນສິ່ງທີ ພຣະເຈົ້າຕ້ອງການໃຫ້ເຮົາເຮັດ.

### ຄໍາແນະນໍາການແປ

- ໃນຫລາຍໆ ຖ້ອຍຄໍາທີວ່າ "ສັດຊື" ສາມາດແປໄດ້ອີກຢ່າງນຶ່ງວ່າ "ພັກດີ" ຫລື "ອຸທິດຕົນ" ຫລື "ເພິ່ງພາໄດ້."
- ໃນຖ້ອຍຄໍາອື່ນໆ ທີວ່າ "ສັດຊື" ສາມາດແປໄດ້ໂດຍໃຊ້ຄໍາ ຫລືຖ້ອຍຄໍາທີໝາຍເຖິງ "ສັດທາຢ່າງຕໍເນື່ອງ" ຫລື "ພາກພຽນໃນຄວາມສັດທາ" ຫລື "ຈົ່ງຮັກພັກດີ" ຫລື "ຄວາມເຊື່ອຖືໄດ້" ຫລື "ຄວາມສັດທາແລະເຊື່ອຟັງພຣະເຈົ້າ."

## ສັດຕູພຣະຄຣິດເຈົ້າ, ປໍລະປັກພຣະຄຣິດເຈົ້າ

### ນິຍາມ

ຄໍາວ່າ "ສັດຕູພຣະຄຣິດເຈົ້າ" ກ່າວເຖິງບຸກຄົນຫຼືຄໍາສອນທີຕໍ້ຕ້ານພຣະເຢຊູຄຣິດເຈົ້າແລະພຣະຣາຊະກິດຂອງພຣະອົງ
ມີສັດຕູຂອງພຣະຄຣິດເຈົ້າຢູ່ຫລວງຫລາຍໃນໂລກນີ.

- ອັກຄະຣາທູດໂຢຮັນໄດ້ຂຽນໄວ້ວ່າ ຄົນຜູ້ເປັນສັດຕູພຣະຄຣິດ ເຂົາຈະຫລອກລວງຜູ້ຄົນໂດຍກ່າວວ່າ
  ພຣະເຢຊູເຈົ້າບໍ່ແມ່ນພຣະເມຊີຢາ ຫຼືປະຕິເສດວ່າພຣະເຢຊູເຈົ້າບໍ່ແມ່ນທັ້ງພຣະເຈົ້າແລະມະນຸດ.
- ພຣະຄັມພີຍັງສອນອີກວ່າມີວິນຍານຫົວໄປທີເປັນສັດຕູພຣະຄຣິດເຈົ້າໃນໂລກນີ້ທີຕໍ້ຕ້ານພຣະຣາຊະກິດຂອງພຣະເຢຊູເຈົ້າ.
- ໃນພຣະຄັມພຣະນິມິດໃນພັນທະສັນຍາໃໝ່ອະທິບາຍວ່າ ຈະມີຄົນທີເອີ້ນວ່າ "ສັດຕູພຣະຄຣິດເຈົ້າ" ມາປະກົດໃນວາລະສຸດທ້າຍ
  ຊາຍຄົນນີ້ຈະຫາທາງທໍາລາຍປະຊາກອນຂອງພຣະເຈົ້າ ແຕ່ໃນທີສຸດເຂົາຈະພ່າຍແພ້ແກ່ພຣະເຢຊູເຈົ້າ.

### ຂໍ້ແນະນໍາໃນການແປ

- ມີອີກຫລາຍວິທີທີຈະແປຄໍານີ ອາດຈະລວມເຖິງຄໍາຫຼືຄໍາເວົ້າທີໝາຍເຖິງ "ຜູ້ຕໍ້ຕ້ານພຣະຄຣິດເຈົ້າ" ຫຼື "ສັດຕູພຣະຄຣິດເຈົ້າ" ຫຼື
  "ຄົນທີຕໍ່ຕ້ານພຣະຄຣິດເຈົ້າ."
- ຄໍາເວົ້າທີວ່າ "ວິນຍານຂອງສັດຕູພຣະຄຣິດເຈົ້າ" ອາດແປໄດ້ອີກວ່າ "ວິນຍານທີຕໍ່ຕ້ານພຣະຄຣິດເຈົ້າ."

## ສັດລ້ຽງ

### ນິຍາມ

ຄໍາວ່າ " ສັດລ້ຽງ " ອ້າງອີງເຖິງສັດຕ່າງໆ ທີຖືກລ້ຽງເພື່ອຕຽມເປັນອາຫານ ແລະ ເປັນຜະລິດຕະພັນທີເປັນປະໂຫຍດອື່ນໆ
ໃນການລ້ຽງສັດບາງສະນິດແມ່ນໃຊ້ງານໃຫ້ສັດເຮັດວຽກຫນັກໄດ້ເຊັ່ນກັນ

- ສະນິດຂອງສັດລ້ຽງລວມທັ້ງຝູງແກະ ງົວຄວາຍ ແຢ້ ແລະ ມ້າ.
- ໃນສະໄໝພຣະຄໍາພີ ຄວາມຮັ່ງມີຂອງບຸກຄົນວັດກັນທີຈໍານວນຝູງສັດທີບຸກຄົນນັ້ນມີຢູ່.
- ສັດລ້ຽງມີໄວ້ເພື່ອການຜະລິດສິນຄ້າຕ່າງໆ ເຊັ່ນ ຂົນແກະ ນ້ໍານົມ ເນີຍ ຂອງໃຊ້ໃນເຮືອນ ແລະ ເຄື່ອງນຸ່ງ.
- ນິສາມາດແປວ່າ ຝາມສັດກະສີກໍາຕ່າງໆ.

## ສັດເດຍລະສານ

### ນິຍາມ

ໃນພຣະຄໍາພີຄໍາວ່າ“ ສັດຮ້າຍ” ມັກຈະເປັນວິທີການເວົ້າອີກຢ່າງ ໜຶ່ງວ່າ“ ສັດ”.

- ສັດເດຍລະສານສັດປ່າແມ່ນສັດປະເພດ ໜຶ່ງທີອາໄສຢູ່ໃນປ່າຫລືທົ່ງໄຮ່ທົ່ງນາແລະບໍ່ໄດ້ຮັບການຝຶກອົບຮົມຈາກຄົນ.


generated on Thu Jul 10 08:45:04 2025

- ສັດເດຍລະສານພາຍໃນປະເທດແມ່ນສັດທີ່ອາໄສຢູ່ນ້ຳຄົນແລະຖືກເກັບຮັກສາໄວ້ສຳລັບອາຫານຫລື ສຳລັບເຮັດວຽກ, ເຊັ່ນວ່າໄຖນາ.ປົກກະຕິແລ້ວຄຳວ່າສັດລ້ຽງແມ່ນໃຊ້ເພື່ອໝາຍເຖິງສັດປະເພດນີ້.
- ໜັງສືພຣະຄຳພີເດີມຂອງດານີເອນແລະໜັງສືພະນິມິດໃນພຣະຄຳພີໃໝ່ກ່າວເຖິງພາບນິມິດທີ່ມີສັດເດຍລະສານທີ່ສະແດງເຖິງ ອຳນາດແລະ ອຳນາດທີ່ຊົ່ວຮ້າຍທີ່ຕໍ່ຕ້ານພຣະເຈົ້າ.
- ສັດຈຳພວກນີ້ຈຳນວນໜຶ່ງຖືກອະທິບາຍວ່າມີລັກສະນະແປກໃໝ່, ເຊັ່ນ: ຫົວແລະຫລາຍໂຕ. ພວກເຂົາມີອຳນາດແລະສິດອຳນາດ, ສະແດງວ່າພວກເຂົາອາດຈະເປັນຕົວແທນຂອງປະເທດ, ປະເທດ, ຫລືອຳນາດທາງການເມືອງອື່ນໆ.
- ວິທີການແປພາສານີ້ອາດປະກອບມີ, "ສິ່ງມີຊີວິດ" ຫລື "ສິ່ງທີ່ສ້າງຂຶ້ນ" ຫລື "ສັດ" ຫລື "ສັດປ່າ", ຂຶ້ນກັບສະພາບການ.

## ສັນຍານ, ພິສູດ, ການແຈ້ງເຕືອນ

### ນິຍາມ

ສັນຍານ ສາມາດໝາຍເຖິງ ສິ່ງຂອງ, ເຫດການ, ຫລືການສື່ສານເຖິງຄວາມໝາຍພິເສດ.

- ສັນຍານ ສາມາດເປັນເຄື່ອງເຕືອນຄວາມຈຳບາງສິ່ງທີ່ໄດ້ສັນຍາໄວ້ແລ້ວ.
- ຮຸ້ງທີ່ພຣະເຈົ້າໄດ້ເນລະມິດໄວ້ເທິງທ້ອງຟ້າເປັນສັນຍານທີ່ເຕືອນຜູ້ຄົນຮູ້ວ່າ ພຣະເຈົ້າຈະບໍ່ທຳລາຍທຸກຊີວິດດ້ວຍການໃຫ້ນ້ຳຖ້ວມໂລກອີກ.
- ພຣະເຈົ້າສັ່ງກັບຄົນອິດສະຣາເອນໃຫ້ລູກຊາຍຂອງພວກເຂົາເຂົ້າເຮັດພິທີຕັດເພື່ອເປັນສັນຍານແຫ່ງພັນທະສັນຍາກັບພວກເຂົາ.
- ສັນຍານສາມາດເປີດເຜີຍຫລືຊີ້ໃຫ້ເຫັນເຖິງບາງສິ່ງບາງຢ່າງໄດ້.
- ທູດສະຫວັນອົງໜຶ່ງໄດ້ໃຫ້ສັນຍານແກ່ຄົນລ້ຽງແກະເພື່ອຈະຊ່ວຍໃຫ້ພວກເຂົາຮູ້ວ່າ ເດັກນ້ອຍຄົນໃດ ໃນເມືອງເບັດເລເຮັມທີ່ເປັນພຣະເມຊີອາທີ່ບັງເກີດໃໝ່.
- ຢູດາອິດສະກາຣີອົດໄດ້ຈູບພຣະເຢຊູເພື່ອເປັນສັນຍານໃຫ້ແກ່ພວກຜູ້ນຳສາສະໜາວ່າ ພຣະເຢຊູເປັນຜູ້ທີ່ພວກເຂົາຄວນຈະຈັບ.
- ສັນຍານສາມາດພິສູດບາງຢ່າງໄດ້ວ່າເປັນຄວາມຈິງ.
- ການອັດສະຈັນຕ່າງໆທີ່ຜູ້ປະກາດພຣະທຳແລະພວກເຫລົ່າສາວົກໄດ້ເຮັດ ເປັນສັນຍານທີ່ພິສູດວ່າຄົນເຫລົ່ານີ້ກຳລັງເວົ້າເຖິງພຣະຄຳຂອງພຣະເຈົ້າ.
- ການອັດສະຈັນຕ່າງໆທີ່ພຣະເຢຊູໄດ້ເຮັດເປັນເຄື່ອງໝາຍທີ່ພິສູດວ່າ ແທ້ຈິງພຣະອົງຊົງເປັນພຣະເມຊີອາ.

### ຄຳແນະນຳໃນການແປ

- ຂຶ້ນຢູ່ກັບເນື້ອເລື່ອງ, " ສັນຍານ" ສາມາດແປວ່າ "ສັນຍານ" ຫລື "ສັນຍາລັກ" ຫລື "ເຄື່ອງໝາຍ" ຫລື "ຫລັກຖານ" ຫລື "ຂໍ້ພິສູດ" ຫລື"ການໃຫ້ສັນຍານ."
- "ການເຮັດສັນຍານດ້ວຍມື" ສາມາດແປວ່າ, "ການເຄື່ອນໄຫວດ້ວຍມື" ຫລື "ການໃຫ້ສັນຍານດ້ວຍມື" ຫລື "ເຮັດສັນຍານ."
- ໃນບາງພາສາ, ອາດຈະມີຫລາຍຄຳສຳລັບ "ສັນຍານ" ທີ່ພິສູດບາງສິ່ງແລະຄຳຕ່າງກັນສຳລັບ "ສັນຍານ" ນັ້ນຄື ການອັດສະຈັນ.

## ສັນຕິສຸກ, ຢ່າງສັນຕິ

### ນິຍາມ

ຄຳວ່າ "ສັນຕິສຸກ" ອ້າງເຖິງສະຖານະທີ່ເປັນຢູ່ຫລືຄວາມຮູ້ສຶກເຊິ່ງປາສະຈາກຄວາມຂັດແຍ້ງ ຄວາມວິຕົກກັງວົນ, ຫຼືຄວາມຢ້ານ ບຸກຄົນຜູ້ທີ່ມີ "ສັນຕິສຸກ" ຈະຮູ້ສຶກສະຫງົບແລະໝັ້ນໃຈໃນຄວາມປອດໄພແລະໝັ້ນຄົງ.

- ຄຳວ່າ "ສັນຕິສຸກ" ຍັງອ້າງເຖິງຊ່ວງເວລາທີ່ກຸ່ມຊົນຊາດຫຼືປະເທດຕ່າງໆ ບໍ່ຢູ່ໃນພາວະສົງຄາມຕໍ່ກັນ. ຄົນເຫຼົ່ານີ້ກ່າວໄດ້ວ່າມີ "ມີຄວາມສຳພັນຢ່າງສັນຕິ."
- ສ່ວນຄຳວ່າ "ສ້າງສັນຕິ" ກັບບຸກຄົນຫຼືກຸ່ມຄົນ ໝາຍຄວາມວ່າກະທຳສິ່ງທີ່ຈະເຮັດໃຫ້ການສູ້ຮົບໄດ້ຍຸດຕິລົງ.
- "ຜູ້ສ້າງສັນຕິ" ໝາຍເຖິງບາງຄົນຜູ້ເຊິ່ງໄດ້ກ່າວສິ່ງທີ່ປະຊາຊົນທີ່ມີອິດທິພົນໃຫ້ດຳເນີນຊີວິດຢ່າງສະຫງົບນຳກັນ
- ມີ "ສັນຕິສຸກ" ກັບຄົນອື່ນໝາຍຄວາມວ່າຢູ່ໃນສະຖານະທີ່ບໍ່ສູ້ຮົບກັບຄົນເຫຼົ່ານັ້ນ.
- ຄວາມສຳພັນທີ່ດີແລະຖືກຕ້ອງລະຫວ່າງພຣະເຈົ້າກັບມະນຸດນັ້ນເກີດຂຶ້ນເມື່ອພຣະເຈົ້າຊົງຊ່ວຍກູ້ມະນຸດຈາກຄວາມຍາບຂອງພວກເຂົາ. ເອີ້ນວ່າການມີ "ສັນຕິສຸກໃນພຣະເຈົ້າ"
- ຄຳກ່າວທັກທາຍທີ່ວ່າ "ຂໍພຣະຄຸນແລະສັນຕິສຸກ" ຖືກໃຊ້ໂດຍບັນດາອັກຄະສາວົກໃນຈົດໝາຍຂອງພວກເຂົາທີ່ມີເຖິງບັນດາຜູ້ເຊື່ອທັ້ງຫຼາຍເພື່ອເປັນການອວຍພອນ.
- ຄຳວ່າ "ສັນຕິສຸກ" ສາມາດອ້າງເຖິງການມີຄວາມສຳພັນທີ່ດີກັບຄົນອື່ນຫຼືກັບພຣະເຈົ້າ.


generated on Thu Jul 10 08:45:04 2025

## ສັນລະເສີນ

### ນິຍາມ

ການສັນລະເສີນຄົນໃດຄົນໜຶ່ງຄືການສະແດງຄວາມນັບຖືໃຫ້ກຽດແກ່ບຸກຄົນນັ້ນ.

- ຜູ້ຄົນສັນລະເສີນພຣະເຈົ້າເພາະຄວາມຍິ່ງໃຫ່ຍຂອງພຣະອົງແລະເພາະສິ່ງອັດສະຈັນທັ້ງໝົດທີ່ພຣະອົງໄດ້ເຮັດ ໃນຖານະພຣະຜູ້ສ້າງແລະພຣະຜູ້ຊ່ວຍໃຫ້ລອດຂອງໂລກນີ້.
- ການສັນລະເສີນພຣະເຈົ້າຫລາຍເທື່ອລວມເຖິງການຂອບພຣະຄຸນໃນສິ່ງທີ່ພຣະອົງໄດ້ຊົງເຮັດ.
- ດົນຕີແລະການຮ້ອງເພງຫລາຍເທື່ອຖືກໃຊ້ໃນການສັນລະເສີນພຣະເຈົ້າ.
- ການສັນລະເສີນພຣະເຈົ້າເປັນສ່ວນໜຶ່ງທີ່ໝາຍເຖິງການນະມັດສະການພຣະອົງ.
- ຄຳວ່າ ''ການສັນລະເສີນ'' ສາມາດແປໄດ້ອີກວ່າ, ''ການເວົ້າດີຂອງ'' ຫລື ''ການໃຫ້ກຽດຢ່າງສູງດ້ວຍຄຳເວົ້າ'' ຫລື ''ການເວົ້າເຖິງສິ່ງທີ່ດີກຽ່ວກັບ.''
- ຄຳນາມວ່າ ''ຄຳສັນລະເສີນ'' ສາມາດແປໄດ້ວ່າ, ''ເວົ້າເຖິງກຽ່ວ'' ຫລື ''ຄຳເວົ້າທີ່ໃຫ້ກຽ່ວ'' ຫລື ''ເວົ້າສິ່ງທີ່ດີກຽ່ວກັບ.''

Mark chunk as done

## ສາງເກັບຮັກສາ

### ນິຍາມ

“ ສາງເກັບຮັກສາ” ແມ່ນອາຄານໃຫຍ່ທີ່ໃຊ້ເພື່ອຮັກສາອາຫານຫລືສິ່ງອື່ນໆ, ໄວ້ເປັນເວລາດົນນານ.

- ໃນພຣະຄຳພີວ່າ“ ສາງເກັບຮັກສາ” ປົກກະຕິແລ້ວແມ່ນ ນຳ ໃຊ້ເຂົ້າໃນການເກັບມ້ຽນເມັດພືດພິເສດແລະອາຫານອື່ນໆທີ່ຈະ ນຳ ໃຊ້ໃນພາຍຫລັງເມື່ອມີການຂາດແຄນອາຫານຍ້ອນຄວາມອຶດຢາກ.
- ຄຳນີ້ໃຊ້ເປັນຕົວປຽບທຽ ເພື່ອກ່າວເຖິງທຸກສິ່ງທີ່ດີທີ່ພະເຈົ້າປະທານໃຫ້ແກ່ປະຊາຊົນຂອງພະອົງ.
- ບັນດາສາງມ້ຽນເຄື່ອງຂອງພຣະວິຫານໄດ້ມ້ຽນບັນດາສິ່ງທີ່ມີຄ່າ ເຊັ່ນ: ຄຳ ແລະເງິນ ທີ່ໄດ້ມາຖວາຍເຄື່ອງຂອງໃຫ້ພຣະຢາເວ ບາງສິ່ງບາງຢ່າງເຫລົ່ານີ້ຖືກເກັບໄວ້ໃຊ້ເພື່ອສ້ອມແປງແລະບຳລຸງຮັກສາພຣະວິຫານ.
- ຄວາມໝາຍອື່ນໃນການແປພາສາ "ສາງເກັບຮັກສາ" ສາມາດປະກອບມີ, "ອາຄານສຳລັບເກັບຮັກສາເມັດພືດ" ຫຼື "ສະຖານທີ່ເກັບຮັກສາອາຫານ" ຫຼື "ຫ້ອງສຳລັບເກັບຮັກສາສິ່ງທີ່ມີຄ່າໃຫ້ຢູ່ໃນຄວາມປອດໄພ".

## ສາບແຊ່ງ,ຖືກສາບແຊ່ງ

### ນິຍາມ

ຄຳວ່າ "ສາບແຊ່ງ" ໝາຍເຖິງການກ່າໃຫ້ເກີດສິ່ງບໍ່ດີໃນທາງລົບທີ່ຈະເກີດກັບບຸກຄົນຫຼືສິ່ງທີ່ຖືກສາບແຊ່ງ.

- ສາບແຊ່ງອາດເປັນຂ້ຄວາມວ່າອັນຕະລາຍຈະເກີດຂຶ້ນກັບບຸກຄົນແລະສິ່ງຂອງບາງສິ່ງ.
- ການສາບແຊ່ງ ບາງຄົນຍັງສາມາດສະແດງອອກເຖິງຄວາມປາດຖະຫນາທີ່ໃຫ້ສິ່ງບໍ່ດີຈະເກີດຂຶ້ນກັບພວກເຂົາ.
- ນອກຈາກນີ້ຍັງກ່າວເຖິງການລົງໂທດຫຼື ສິ່ງທີ່ເປັນທາງລົບ

ອື່ນໆ ທີ່ບາງຄົນເປັນເຫດໃຫ້ເກີດຂຶ້ນກັບບາງຄົນ.

#### ຄຳແນະນຳໃນການແປ

- ຄຳນີ້ອາດແປວ່າ"ທຳໃຫ້ເກີດສິ່ງບໍ່ດີຂຶ້ນ" ຫຼື "ປະກາດວ່າມີບາງຢ່າງທີ່ບໍ່ດີຈະເກີດຂຶ້ນ"ຫຼື "ສາບານວ່າ "ຈະກໍ່ໃຫ້ເກີດສິ່ງຊົ່ວຮ້າຍຂຶ້ນ".
- ໃນກໍລະນີຂອງພຣະເຈົ້າທີ່ສົ່ງຄຳສາບແຊ່ງໄປຍັງປະຊາຊົນທີ່ບໍ່ເຊື່ອຟັງຂອງພຣະອົງ ອາດແປວ່າ "ລົງໂທດດ້ວຍການປ່ອຍໃຫ້ສິ່ງບໍ່ດີເກີດຂຶ້ນ.
- ຄຳວ່າ "ສາບແຊ່ງ"ເມື່ອໃຊ້ເພື່ອອະທິບາຍ ປະຊາຊົນສາມາດແປໄດ້ເຊັ່ນນີ້.


generated on Thu Jul 10 08:45:04 2025

## ສາມັກຄີທັມ, ຄວາມສາມັກຄີທັມ

### ນິຍາມ

ໂດຍທົ່ວໄປຄໍາວ່າ "ສາມັກຄີທັມ"
ກ່າວເຖິງການມີຄວາມສໍາພັນແບບເພື່ອນລະຫວ່າງສະມາຊິກໃນກຸ່ມຄົນທີ່ແບ່ງປັນຄວາມສົນໃຈແລະປະສົບປະການທີ່ຄ້າຍຄືກັນ.

- ໃນພຣະຄໍາພີ, ຄໍາວ່າ "ສາມັກຄີທັມ" ປົກກະຕິແລ້ວກ່າວເຖິງຄວາມເປັນນຶ່ງດຽວກັນຂອງຜູ້ສັດທາໃນພຣະຄຣິດ.
- ການສາມັກຄີທັມຂອງຄຣິສະຕຽນຄືການແບ່ງປັນຄວາມສໍາພັນທີ່ຜູ້ສັດທາມີລະຫວ່າງກັນ
  ຜ່ານຄວາມສໍາພັນຂອງພວກເຂົາກັບພຣະຄຣິດແລະພຣະວິນຍານບໍຣິສຸດ.
- ຄຣິສະຕຽນຍຸກຕົ້ນໆ ສະແດງການສາມັກຄີທັມຂອງພວກເຂົາຜ່ານການຝັ່ງຄໍາສອນພຣະຄໍາພີຂອງພຣະເຈົ້າແລະອະທິຖານດ້ວຍກັນ,
  ຜ່ານການແບ່ງປັນສິ່ງຂອງທີ່ພວກເຂົາມີ,ແລະການຮັບປະທານອາຫານຮ່ວມກັນ.
- ຄຣິສະຕຽນກໍມີຄວາມສາມັກຄີທັມກັບພຣະເຈົ້າຜ່ານຄວາມເຊື່ອຂອງພວກເຂົາໃນພຣະເຢຊູແລະສິນພຣະຊົນເທິງໄມ້ກາງແຂນທີ່ໄດ້ທໍາລາຍອຸປະສັກລະ

### ຄໍາແນະນໍາການແປ

- ແນວທາງການແປຄໍາວ່າ "ສາມັກຄີທັມ" ສາມາດລວມທັງຄໍາວ່າ "ການແບ່ງປັນຊຶ່ງກັນແລະກັນ" ຫຼື "ສໍາພັນທະໄມຕີ" ຫຼື
  "ຊຸມຊົນຄຣິສະຕຽນ".

## ສາລະພາບ, ຍອມຮັບ, ການສາລະພາບ

### ນິຍາມ

ສາລະພາບ ໝາຍເຖິງການຍອມຮັບ ຫຼືການຢືນຢັນວ່າບາງສິ່ງເປັນຄວາມຈິງ. "ການສາລະພາບ" ເປັນການກ່າວ ຫຼື
ການຍອມຮັບວ່າບາງສິ່ງເປັນຄວາມຈິງ.

- ຄໍາວ່າ "ສາລະພາບ" ສາມາດກ່າວເຖິງການກ່າວຄວາມຈິງເລື່ອງພຣະເຈົ້າຢ່າງກ້າຫານ.
  ຄໍານີ້ຍັງກ່າວເຖິງການຍອມຮັບວ່າເຮົາເຮັດບາບດ້ວຍ.
- ພຣະຄໍາພີບອກວ່າຖ້າປະຊາຊົນສາລະພາບບາບຂອງພວກເຂົາຕໍ່ພຣະເຈົ້າ, ພຣະອົງຈະຊົງອະໄພໃຫ້ພວກເຂົາ.
- ອັກຄະສາວົກຢາໂກໂບໄດ້ຂຽນໃນຈົດໝາຍຂອງທ່ານວ່າ ເມື່ອຜູ້ເຊື່ອສາລະພາບບາບພວກເຂົາຕໍ່ກັນແລະກັນ.
  ນີ້ຈະນໍາໄປສູ່ການຮັກສາໂຣກຝ່າຍວິນຍານ.
- ອັກຄະສາວົກໂປໂລໄດ້ຂຽນໄປເຖິງຊາວຟີລິບປອຍວ່າວັນໜຶ່ງທຸກຄົນຈະຕ້ອງຍອມຮັບ
  ແລະປະກາດວ່າພຣະເຢຊູຊົງເປັນອົງພຣະຜູ້ເປັນເຈົ້າ.
- ໂປໂລຍັງໄດ້ເວົ້າອີກດ້ວຍວ່າ ຖ້າປະຊາຊົນຍອມຮັບວ່າພຣະເຢຊູຊົງເປັນອົງພຣະຜູ້ເປັນເຈົ້າ
  ແລະເຊື່ອວ່າພຣະເຈົ້າໄດ້ເຮັດໃຫ້ພຣະອົງເປັນຂຶ້ນມາຈາກຄວາມຕາຍ, ພວກເຂົາກໍຈະໄດ້ຮັບຄວາມພົ້ນ.

### ຄໍາແນະນໍາໃນການແປ

- ການແປຄໍາວ່າ "ສາລະພາບ" ໃນຮູບແບບຕ່າງໆຂຶ້ນຢູ່ກັບເນື້ອຫາລວມເຖິງ "ຍອມຮັບ" ຫຼື "ພິສູດແລ້ວ" ຫຼື "ການປະກາດ" ຫຼື"ຮັບຮູ້"
  ຫຼື "ຢືນຢັນ."
- ການແປ "ການສາລະພາບ" ໃນຮູບແບບທີ່ແຕກຕ່າງອອກໄປ ຄື, "ການປະກາດ" ຫຼື" ການເປັນພະຍານ" ຫຼື
  "ເວົ້າກ່ຽວກັບສິ່ງທີ່ເຮົາເຊື່ອ" ຫຼື " ຍອມຮັບວ່າທໍາບາບ."

## ສາວົກ, ອັກຄະສາວົກ

### ນິຍາມ

“ ສາວົກ” ແມ່ນຜູ້ຊາຍທີ່ພຣະເຢຊູສົ່ງມາເພື່ອປະກາດກ່ຽວກັບພຣະເຈົ້າແລະຣາຊະອານາຈັກຂອງພຣະອົງ. ຄໍາ ວ່າ "ອັກຄະ ສາ ວົກ "
ໝາຍເຖິງຕໍາແໜ່ງ ແລະສິດອໍານາດຂອງຜູ້ທີ່ຖືກເລືອກເປັນອັກຄະສາວົກ.

- ຄໍາ ວ່າອັກຄະສາວົກໝາຍຄວາມວ່າ, "ຄົນທີ່ຖືກສົ່ງໄປເພື່ອຈຸດ ປະສົງພິເສດ." ອັກຄະສາວົກມີສິດອໍານາດເທົ່າກັບຜູ້ທີ່ໄດ້ສົ່ງລາວໄປ.
- ສາວົກສິບສອງຄົນທີ່ໃກ້ຊິດທີ່ສຸດຂອງພຣະເຢຊູກາຍເປັນອັກຄະສາວົກຄົນທໍາອິດ.
  ຄົນອື່ນໆເຊັ່ນໂປໂລແລະຢາໂກໂບກໍກາຍເປັນອັກຄະສາວົກ.
- ໂດຍອໍານາດຂອງພຣະເຈົ້າ, ພວກອັກຄະສາວົກສາມາດສັ່ງ ສອນເລື່ອງຂ່າວປະເສີດຢ່າງກ້າຫານແລະປຶ້ນປົ່ວຄົນ,
  ລວມທັ້ງບັ່ງຄັບໃຫ້ພວກຜີປີສາດອອກມາຈາກຄົນໄດ້.


generated on Thu Jul 10 08:45:04 2025

### ຄຳແນະນຳໃນການແປ

- ຄຳວ່າ "ອັກຄະສາວົກ" ຍັງສາມາດແປດ້ວຍຄຳຫລືປະໂຫຍກທີ່ມີຄວາມໝາຍ ວ່າ "ຄົນທີ່ຖືກສົ່ງອອກ" ຫລື "ສົ່ງຄົນໜຶ່ງ" ຫລື "ຄົນທີ່ຖືກເອີ້ນໃຫ້ອອກໄປປະກາດຂ່າວປະເສີດເລື່ອງລາວຂອງພຣະເຈົ້າໃຫ້ແກ່ຜູ້ຄົນ."
- ມັນເປັນສິ່ງສຳຄັນທີ່ຈະແປ ຄຳ ວ່າອັກຄະສາວົກແລະ“ ສາວົກ” ໃນລັກສະນະທີ່ແຕກຕ່າງຈາກກັນແລະກັນ.
- ຍັງພິຈາລະນາວິທີການໃຊ້ຄຳສັບນີ້ໃນການແປພຣະຄຳພີເປັນພາສາທ້ອງຖິ່ນຫລືປະເທດຊາດ.

## ສຳແດງ, ການເປີດເຜີຍ

### ນິຍາມ

ຄຳວ່າ "ສຳແດງ" ໝາຍເຖິງການເຮັດໃຫ້ບາງສິ່ງບາງຢ່າງເປັນທີ່ຮູ້ຈັກ. "ການເປີດເຜີຍ" ແມ່ນສິ່ງທີ່ເຮັດໃຫ້ເປັນທີ່ຮູ້ຈັກ.

- ໃນພຣະຄຳພີຄຳວ່າ“ສຳແດງ ” ມັກຖືກໃຊ້ເພື່ອບັນລະຍາຍເຖິງວິທີທີ່ພຣະເຈົ້າໄດ້ເຮັດໃຫ້ຕົວເອງຮູ້ຈັກກັບຜູ້ຄົນ.
- ພຣະເຈົ້າຍັງໄດ້ສຳແດງຕົວເອງໂດຍຜ່ານທຸກສິ່ງທີ່ລາວສ້າງແລະຜ່ານການສື່ສານຂອງລາວກັບຜູ້ຄົນໂດຍການເວົ້າແລະການຂຽນຂໍ້ຄວາມ.
- ພຣະເຈົ້າຍັງສຳແດງຕົນເອງຜ່ານຄວາມຝັນຫລືຜ່ານນິມິດ.
- ເມື່ອໂປໂລກ່າວວ່າລາວໄດ້ຮັບຂ່າວປະເສີດໂດຍ“ ການເປີດເຜີຍເລື່ອງລາວຂອງພຣະເຢຊູຄຣິດ,” ລາວໝາຍຄວາມວ່າພຣະເຢຊູເອງໄດ້ສຳແດງຂ່າວປະເສີດແກ່ລາວ.
- ພຣະຄຳພີໃໝ່ "ການເປີດເຜີຍ" ແມ່ນກ່ຽວກັບພຣະເຈົ້າເປີດເຜີຍເຫດການທີ່ຈະເກີດຂຶ້ນໃນຍຸກສຸດທ້າຍ. ພຣະອົງໄດ້ເປີດເຜີຍເລື່ອງນີ້ຕໍ່ອັກຄະສາວົກໂຢຮັນໂດຍຜ່ານນິມິດ.

### ຄຳແນະນຳໃນການແປ

- ວິທີການອື່ນໃນການແປ "ເປີດເຜີຍ" ສາມາດປະກອບມີ, "ເຮັດໃຫ້ຮູ້ຈັກ" ຫລື "ເປີດເຜີຍ" ຫລື "ສະແດງໃຫ້ເຫັນຢ່າງຈະແຈ້ງ."
- ອີງຕາມສະພາບການ, ວິທີການທີ່ເປັນໄປໄດ້ໃນການແປ "ການເປີດເຜີຍ" ອາດຈະແມ່ນ "ການສື່ສານຈາກພຣະເຈົ້າ" ຫລື "ສິ່ງທີ່ພຣະເຈົ້າໄດ້ເປີດເຜີຍ" ຫລື "ຄຳສອນກ່ຽວກັບພຣະ ເຈົ້າ." ມັນດີທີ່ສຸດທີ່ຈະຮັກສາຄວາມໝາຍຂອງ "ເປີດເຜີຍ" ໃນ ຄຳນີ້.
- ປະໂຫຍກທີ່ວ່າ "ບ່ອນທີ່ບໍ່ມີການເປີດເຜີຍ" ສາມາດຖືກແປເປັນ "ໃນເວລາທີ່ພຣະເຈົ້າບໍ່ໄດ້ເປີດເຜີຍຕົວເອງຕໍ່ຜູ້ຄົນ" ຫລື "ເມື່ອພຣະເຈົ້າບໍ່ໄດ້ເວົ້າກັບຜູ້ຄົນ" ຫລື "ໃນບັນດາຄົນທີ່ພຣະເຈົ້າບໍ່ໄດ້ສື່ສານ."

## ສິດ

### ນິຍາມ

ຄຳວ່າ "ສິດ" ກ່າວເຖິງບຸກຄົນທີ່ໃຊ້ເວລາສ່ວນໃຫຍ່ກັບຄຣູ, ຮຽນຮູ້ບຸກຄະລິກລັກສະນະ ແລະການສອນຂອງຄຣູຜູ້ນັ້ນ.

- ຄົນທີ່ຕິດຕາມພຣະເຢຊູໄປເລື້ອຍໆ, ຟັງຄຳສອນຂອງພຣະອົງແລະເຊື່ອຟັງຄຳສອນນັ້ນໆ,ພວກເຂົາຖືກເອີ້ນວ່າສິດຂອງພຣະອົງ.
- ໂຢຮັນຜູ້ໃຫ້ບັບຕິສະມາກໍມີສິດດ້ວຍ.
- ໃນລະຍະພັນທະກິດຂອງພຣະເຢຊູ, ມີສິດຫຼາຍຄົນທີ່ຕິດຕາມພຣະອົງແລະໄດ້ຟັງຄຳສອນຂອງພຣະອົງ.
- ພຣະເຢຊູເລືອກສິດສິບສອງໃຫ້ເປັນຜູ້ຕິດຕາມທີ່ໃກ້ຊິດພຣະອົງຫຼາຍທີ່ສຸດ, ຄົນເຫຼົ່ານີ້ກາຍເປັນທີ່ຮູ້ຈັກໃນຖານະ "ອັກຄະທູດ" ຂອງພຣະອົງ.
- ອັກຄະທູດສິບສອງຄົນຂອງພຣະເຢຊູຍັງຄົງເປັນທີ່ຮູ້ຈັກໃນຖານະ "ສິດ" ຫຼື "ສິບສອງຄົນ" ຂອງພຣະອົງ.
- ກ່ອນທີ່ພຣະເຢຊູສະເດັດຂຶ້ນສູ່ສະຫວັນ,ພຣະອົງຊົງບັນຊາໃຫ້ສິດຂອງພຣະອົງສອນຄົນອື່ນກ່ຽວກັບການເປັນສິດຂອງພຣະອົງ ເຊັ່ນດຽວກັນ.
- ຄົນທີ່ສັດທາໃນພຣະເຢຊູແລະເຊື່ອຕາມຄຳສອນຂອງພຣະອົງຖືກເອີ້ນວ່າ ສິດຂອງພຣະເຢຊູ.

### ຄຳແນະນຳໃນການແປ

ຄຳວ່າ "ສິດ" ສາມາດແປໄດ້ໂດຍຄຳຫຼືຄຳເວົ້າທີ່ໝາຍເຖິງ "ຜູ້ຕິດຕາມ" ຫຼື "ນັກສຶກສາ" ຫຼື "ນັກຮຽນ" ຫຼື "ຜູ້ຮຽນ".

- ກວດສອບໃຫ້ແນ່ໃຈວ່າ ການແປຂອງຄຳນີ້ບໍ່ໄດ້ໝາຍເຖິງສະເພາະນັກສຶກສາທີ່ຮຽນຮູ້ໃນຫ້ອງຮຽນເທົ່ານັ້ນ.
- ການແປຄຳນີ້ຄວນແຕກຕ່າງຈາກຄຳແປຂອງຄຳວ່າ"apostl".

## ສິດຍາພິບານ

### ນິຍາມ

ຄຳວ່າ "ສິດຍາພິບານ" ມີຄວາມໝາຍຕາມຕົວອັກສອນເຊັ່ນດຽວກັນກັບຄຳວ່າ "ຜູ້ລ້ຽງແກະ"
ໃຊ້ເປັນຄຳຊຶ່ງບອກຕຳແໜ່ງຂອງຄົນຊຶ່ງເປັນຜູ້ນຳຝ່າຍຈິດວິດຍານຂອງຄົນທີ່ເຊື່ອ.

- ໃນພຣະຄັມພີສະບັບພາສາອັງກິດນັ້ນ ຄຳວ່າ "ສິດຍາພິບານ" ປາກົດພຽງເທື່ອດຽວໃນພຣະທັມ ເອເຟໂຊ
  ຄຳຄ້ຳກ່າວເປັນຄຳດຽວກັບຄຳວ່າ "ຜູ້ລ້ຽງແກະ" ເຊິ່ງປາກົດໃນພຣະຄັມຂໍ້ອື່ນໆ.
- ສຳລັບພາສາອື່ນໆນັ້ນ ຄຳວ່າ "ສິດຍາພິບານ" ອາດເປັນຄຳດຽວກັບຄຳວ່າ "ຜູ້ລ້ຽງແກະ"
- ເປັນຄຳດຽວກັບຄຳທີ່ໃຊ້ອ້າງເຖິງພຣະເຢຊູໃນຖານະ "ຜູ້ລ້ຽງແກະທີ່ດີ."

### ຄຳແນະນຳໃນການແປ

- ທາງທີ່ດີທີ່ສຸດຄວນແປຄຳນີ້ເປັນຄຳດຽວທີ່ແປວ່າ "ຜູ້ລ້ຽງແກະ" ໃນພາສາຕາມໂຄງການແປ.
- ວິທີອື່ນໃນການແປຄຳນີ້ລວມເຖິງ"ຜູ້ລ້ຽງຝ່າຍຈິດວິດຍານ" ຫລື "ຜູ້ນຳຜູ້ລ້ຽງຄຣິດສະຕຽນ."

## ສິດທິອຳນາດ

### ນິຍາມ

ຄຳວ່າ " ສິດທິອຳນາດ " ເວົ້າເຖິງອຳນາດຫລືອິດທິພົນແລະການຄວບຄຸມທີ່ບາງຄົນມີເໜືອບາງຄົນ.

- ກະສັດແລະຜູ້ປົກຄອງຄົນອື່ນໆ ມີສິດທິອຳນາດເໜືອປະຊາຊົນທີ່ພວກເຂົາປົກຄອງ.
- ຄຳວ່າ " ຜູ້ມີອຳນາດທັ້ງຫລາຍ " ເວົ້າເຖິງປະຊາຊົນ ຣັຖະບານ ຫລືອົງການຕ່າງໆ ທີ່ມີສິດອຳນາດເໜືອຄົນອື່ນ.
- ເຈົ້ານາຍມີອຳນາດເໜືອພວກຄົນຮັບໃຊ້ ຫລືພວກທາດຂອງພວກເຂົາ ຜູ້ປົກຄອງມີອຳນາດເໜືອພວກເດັກນ້ອຍຂອງພວກເຂົາ.
- ຣັຖະບານມີອຳນາດ ຫລື ສິດທິທີ່ຈະອອກກົດໝາຍທີ່ຈະປົກຄອງພວກພົນລະເມືອງຂອງພວກເຂົາ.

### ຂໍ້ແນະນຳໃນການແປ

- ຄຳວ່າ "ສິດທິອຳນາດ " ອາດແປໄດ້ອີກວ່າ " ຄວບຄຸມ " ຫລື " ສິດທິ " ຫລື " ຄຸນສົມບັດ. "
- ບາງຄັ້ງຄຳວ່າ " ສິດທິອຳນາດ " ຖືກໃຊ້ໝາຍຄວາມວ່າ " ອຳນາດ. "
- ມີຄຳວ່າ " ຜູ້ມີອຳນາດ " ຖືກໃຊ້ເພື່ອເວົ້າເຖິງຜູ້ຄົນຫລືອົງການຕ່າງໆ ທີ່ປົກຄອງປະຊາຊົນ, ຄຳນີ້ກໍສາມາດແປໄດ້ອີກວ່າ "ພວກຜູ້ນຳ "ຫລື " ພວກຜູ້ປົກຄອງ " ຫລື " ພວກຜູ້ມີອຳນາດ. "
- ຖ້ອຍຄຳທີ່ວ່າ " ດ້ວຍສິດທິອຳນາດຂອງຕົນເອງ " ຫລື " ຂຶ້ນຢູ່ກັບຄຸນສົມບັດຂອງເຂົາເອງ. "
- ມີຄຳທີ່ວ່າ " ພາຍໃຕ້ສິດທິອຳນາດ, " ອາດຈະໄດ້ວ່າ " ຮັບຜິດຊອບທີ່ຈະເຊື່ອຟັງ, " ຫລື " ຕ້ອງເຊື່ອຟັງຄຳສັ່ງຂອງຄົນອື່ນ. "

## ສິດທິໃນການເກີດ

### ນິຍາມ

ຄຳວ່າ "ສິດທິອ້າຍກົກ" ໃນພຣະຄຳພີໝາຍເຖິງກຽດຕິຍົດ, ຊື່ຄອບຄົວ,
ແລະຄວາມຮັ່ງມີທາງຮ່າງກາຍເຊິ່ງຕາມປົກກະຕິແມ່ນໃຫ້ກັບລູກຊາຍກົກໃນຄອບຄົວ.

- ລູກກົກຂອງລູກຊາຍກົກປະກອບມີສອງສ່ວນຂອງມໍລະດົກຂອງພໍ່.
- ໂດຍປົກກະຕິລູກຊາຍກົກຂອງກະສັດໄດ້ຖືກແຕ່ງຕັ້ງໃຫ້ເປັນຜູ້ປົກຄອງຕາມປົກກະຕິຫລັງຈາກພໍ່ຂອງລາວຕາຍ.
- ເອຊາວຂາຍສິດທິອ້າຍກົກຂອງລາວໃຫ້ຍາໂຄບນ້ອງຊາຍຂອງລາວ. ຍ້ອນເຫດນີ້,
  ຢາໂຄບຈຶ່ງໄດ້ຮັບມໍລະດົກຈາກລູກຊາຍກົກແທນເອຊາວ.
- ສິດທິອ້າຍກົກກໍຍັງລວມເອົາກຽດຕິຍົດຂອງການມີລູກຫລານຂອງຄອບຄົວຕາມເສັ້ນທາງຂອງລູກຊາຍກົກ.

% ຄຳແນະນຳໃນການແປ

- ວິທີການທີ່ເປັນໄປໄດ້ໃນການແປ "ສິດທິລຸ້ນກ່ອນ" ສາມາດປະກອບມີ, "ສິດທິແລະຄວາມຮັ່ງມີຂອງລູກຊາຍກົກ" ຫລື
  "ກຽດຕິຍົດໃນຄອບຄົວ" ຫລື "ສິດທິພິເສດແລະການເປັນມໍລະດົກຂອງລູກກົກ."


generated on Thu Jul 10 08:45:04 2025

## ສິນບົນ ເງິນປົກປາກ

### ນິຍາມ

ການ“ ສິນບົນ” ໝາຍເຖິງການໃຫ້ບາງສິ່ງບາງຢ່າງທີ່ມີຄ່າເຊັ່ນເງິນ, ມີອິດທິພົນຕໍ່ບຸກຄົນນັ້ນທີ່ຈະເຮັດໃນສິ່ງທີ່ບໍ່ສັດຊື່.

- ພວກທະຫານທີ່ເຝົ້າອຸ່ມ່ຽງທີ່ຫວ່າງຂອງພຣະເຢຊູໄດ້ຮັບເງິນໃຫ້ຕົວະກ່ຽວກັບເຫດການທີ່ເກີດຂຶ້ນ.
- ບາງຄັ້ງເຈົ້າໜ້າທີ່ລັດຖະບານຈະໄດ້ຮັບສິນບົນເພື່ອເບິ່ງຂ້າມຄວາມຍຸດຕິທຳ ຫລື ລົງຄະແນນສຽງໂດຍວິທີໃດໜຶ່ງ.
- ພຣະຄຳພີ ຫ້າມບໍ່ໃຫ້ເອົາເງິນທີ່ບໍ່ຍຸດຕິທຳ ຫລື ຮັບສິນບົນ.
- ຄຳວ່າ "ສິນບົນ" ສາມາດຖືກແປວ່າ "ການຈ່າຍທີ່ບໍ່ຊື່ສັດ" ຫລື "ການຈ່າຍເງິນເພື່ອຕົວະ" ຫລື "ລາຄາ ສຳລັບການລະເມີດກົດລະບຽບ."
- ການໃຫ້ສິນບົນສາມາດຖືກແປດ້ວຍ ຄຳສັບຫລືປະໂຫຍກທີ່ມີຄວາມໝາຍວ່າ, "ຈ່າຍຄ່າອິດທິພົນ (ຜູ້ໃດຜູ້ໜຶ່ງ)" ຫລື "ຈ່າຍເພື່ອໃຫ້ໄດ້ຮັບຄວາມໂປດປານທີ່ບໍ່ຊື່ສັດ" ຫລື "ຈ່າຍຄ່າຕອບແທນ."

## ສິບສອງຕະກຸນຂອງຊົນຊາດອິດສະຣາເອນ

### ນິຍາມ

ຄຳວ່າ “ສິບສອງຕະກຸນຂອງຊົນຊາດອິດສະຣາເອນ” ໝາຍເຖິງລູກຊາຍທັ້ງສິບສອງຄົນຂອງຢາໂຄບ ແລະຜູ້ສືບເຊື້ອສາຍຂອງພວກເຂົາ.

- ຢາໂຄບມີຊື່ອີກຊື່ໜຶ່ງວ່າ. ຫລັງຈາກນັ້ນພຣະເຈົ້າກໍໄດ້ປ່ຽນຊື່ຢາໂຄບໃຫ້ເປັນອິດສະຣາເອນ.
- ນີ້ຄືລາຍຊື່ຂອງທັ້ງສິບສອງຕະກຸນ: ຮູເບັນ, ຊີເມໂອນ, ເລວີ, ດານ, ເນັບທາລີ, ກາດ, ອາເຊ, ອິດຊະຄາ, ເຊບູໂລນ, ໂຢເຊັບ, ແລະ ເບັນຢາມິນ.
- ຜູ້ສືບເຊື້ອສາຍຂອງເລວີ ບໍ່ໄດ້ຄອບຄອງມໍລະດົກທີ່ດິນຢູ່ໃນດິນແດນການາອານ ເພາະວ່າພວກເຂົາເປັນຕະກູນຂອງປະໂລຫິດ ເຊິ່ງເປັນຜູ້ທີ່ຖືກແຕ່ງຕັ້ງໃຫ້ເປັນຜູ້ຮັບໃຊ້ພຣະເຈົ້າ ແລະປະຊາຊົນຂອງພຣະອົງ.
- ໂຢເຊັບໄດ້ຮັບມໍລະດົກທີ່ດິນເປັນສອງເທົ່າ ເຊິ່ງໂຢເຊັບໄດ້ມອບໃຫ້ລູກຊາຍທັ້ງສອງຂອງຕົນທີ່ມີຊື່ວ່າ: ເອຟຣາອິມ ແລະມານາເຊ.
- ພຣະຄຳພີໄດ້ກ່າວເຖິງທັ້ງສິບສອງຕະກຸນນີ້ຢູ່ຫລາຍຄັ້ງ ແລະບາງຄັ້ງກໍໄດ້ມີຂໍ້ມູນທີ່ແຕກຕ່າງ ເຊັ່ນວ່າ ບາງຄັ້ງຕະກູນເລວີ, ຕະກູນໂຢເຊັບ, ແລະ ຕະກູນດານ ບໍ່ໄດ້ຖືກກ່າວເຖິງ ແຕ່ວ່າບາງຄັ້ງກໍມີການເພີ່ມຊື່ຂອງລູກຊາຍທັ້ງສອງຄົນຂອງໂຢເຊັບກໍຄື ເອຟຣາອິມ ແລະມານາເຊ ເຂົ້າມາໃນລາຍຊື່ແທນ.

## ສິ່ງທີ່ມີຊີວິດ

### ນິຍາມ

ຄຳວ່າ "ສິ່ງທີ່ມີຊີວິດ" ກ່າວເຖິງສັບພະສິ່ງທີ່ພຣະເຈົ້າຊົງສ້າງ, ທັ້ງມະນຸດແລະສັດ.

- ຜູ້ປະກາດພຣະທຳເອເຊກຽນໄດ້ອະທິບາຍເຖິງການເຫັນ "ສິ່ງທີ່ມີຊີວິດ" ໃນນິມິດຂອງເຂົາກ່ຽວກັບພຣະສະຫງ່າລາສີຂອງພຣະເຈົ້າ. ເຂົາບໍ່ຮູ້ວ່າສິ່ງເຫຼົ່ານັ້ນເປັນຫຍັງ, ດັ່ງນັ້ນເຂົາໄດ້ໃຫ້ຊື່ແບບຫົວໄປນີ້ແກ່ສິ່ງເຫຼົ່ານັ້ນ.
- ໂປດຮູ້ວ່າ ຄຳວ່າ "ການສ້າງ" ມີຄວາມໝາຍທີ່ແຕກຕ່າງກັນ ເນື່ອງຈາກມີທຸກສິ່ງທີ່ພຣະເຈົ້າໄດ້ຊົງສ້າງ, ທັ້ງສິ່ງມີຊີວິດແລະ

ບໍ່ມີຊີວິດ (ເຊັ່ນແຜ່ນດິນ, ນ້ຳ, ແລະດວງດາວທັ້ງຫລາຍ). ຄຳວ່າ "ສິ່ງມີຊີວິດ" ໝາຍເຖິງສິ່ງທີ່ມີຊີວິດເທົ່ານັ້ນ.

## ສິ່ງໂຕ

### ນິຍາມ

ສິ່ງໂຕເປັນສັດປ່າທີ່ມີຂະໜາດໃຫ່ຍລັກສະນະຄືກັບແມວ ມີແຂ້ວ ແລະ ກົ່ງເລັບແຂງແຮງສຳຫລັບການຂ້າ ແລະ ຈີກເນື້ອເຫຍື່ອຂອງພວກມັນ

- ສິ່ງໂຕມີຮ່າງກາຍທີ່ເຕັ້ມໄປດ້ວຍກຳລັງ ແລະ ຄວາມວ່ອງໄວຢ່າງຫລາຍໃນການລ່າເຫຍື່ອຍ ຂົນຂອງມັນສັ້ນ ແລະ ມີສີນ້ຳຕານອອກສີທອງ.
- ສິ່ງໂຕ ໂຕຜູ້ມີຂົນທີ່ເປັນແຜງຢູ່ຮອບຫົວຂອງພວກມັນ.
- ສິ່ງໂຕຂ້າສັດອື່ນເພື່ອເປັນອາຫານ ແລະ ສາມາດເຮັດອັນຕະລາຍໃຫ້ກັບມະນຸດໄດ້ເຊັ່ນກັນ.
- ເມື່ອກະສັດດາວິດຍັງເປັນເດັກຫນຸ່ມ ເຂົາຂ້າພວກສິ່ງໂຕເພື່ອປົກປ້ອງແກະທີ່ເຂົາເບິ່ງແຍງ.
- ແຊມຊັ້ນກໍໄດ້ຂ້າສິ່ງໂຕດ້ວຍມືຂອງເຂົາ.


generated on Thu Jul 10 08:45:04 2025

## ສີດາ

### ນິຍາມ

ຄໍາວ່າ "ສີດາ" ກ່າວເຖິງຕົ້ນສົນຂະໜາດໃຫຍ່ ທີຕາມປົກກະຕິມີເນື້ອໄມ້ສີແດງປົນນ້ໍາຕານ ເຊັ່ນດຽວກັບຕົ້ນສົນອື່ນໆ
ມັນມີໝາກແລະໃບສີເຂັ້ມ

- ພັນທະສັນຍາເດີມມັກຈະກ່າວເຖິງຕົ້ນສົນສີດາໃນການໃຊ້ຂອມໂຍງເຖິງເລບານອນທີຊຶ່ງຕົ້ນສົນເຫຼົ່ານີ້ເຕີບໂຕງອກງາມ
- ໄມ້ສົນສີດາໃຊ້ໃນການກໍ່ສ້າງພຣະວິຫານກຸງເຢຣູຊາເລັມ
- ນອກຈາກນີ ສົນສີດາຫຍັງໃຊ້ໃນການເຮັດເຄື່ອງບູຊາ ແລະວິທີສໍາລະເຮັດໃຫ້ປະຊາຊົນບໍລິສຸດ

## ສີມ່ວງ

### ນິຍາມ

ຄໍາວ່າ "ສີມ່ວງ" ເປັນຊື່ຂອງສີທີປະສົມກັນລະຫວ່າງສີນ້ໍາເງິນແລະສີແດງ

- ໃນສະໄໝບູຮານສີມ່ວງຄືສີທີຫາຍາກແລະມີຄ່າສູງທີໃຊ້ໃນການຍ້ອມເສື້ອຜ້າຂອງກະສັດແລະເຈົ້າຫນ້ໍາທີຣະດັບສູງ
- ເນື່ອງຈາກເປັນຄ່າໃຊ້ສູງແລະໃຊ້ເວລາດົນໃນການຜະລິດສີຍ້ອມນີ ເສື້ອຜ້າສີມ່ວງຈຶ່ງຖືວ່າເປັນສັນຍະລັກຂອງຄວາມມັ່ງຄັ່ງ
  ຄວາມໂດດເດັ່ນ ແລະຢູ່ໃນເຊື້ອພະວົງ
- ສີມ່ວງຍັງເປັນສີທີໃຊ້ເຮັດເປັນຜ້າມ່ານໃນຫໍເຕັ່ນແລະວິຫານແລະສໍາລັບເສື້ອເອໂຟດທີປະໂລຫິດສວມໃສ່
- ສີຍ້ອມສີມ່ວງຖືກສກັດມາຈາກຫອຍທາກຫະເລໂດຍການບົດຫລືຕົ້ມຫອຍນັບຫລືເຮັດໃຫ້ພວກມັນປ່ອຍສີຍ້ອມໃນຂະນະທີຍັງມີຊີວິດຢູ່
  ນີເປັນກະບວນການທີມີຣາຄາແພງ
- ທະຫານໂຣມສວມເສື້ອຄຸມສີມ່ວງໃຫ້ພະເຍຊູກ່ອນທີການຖືກຄຶງຂອງພະອົງ
  ເພືອເຍາະເຍີ້ຍພະອົງທີພະອົງອ້າງວ່າຊົງເປັນກະສັດຂອງຊາວຢິວ
- ນາງລີເດຍຈາກເມືອງຟີລິບປອຍເປັນຜູ້ຍິງທີດໍາເນີນຊີວິດຢູ່ດ້ວຍການຂາຍເສື້ອຜ້າສີມ່ວງ

## ສີລາເສົາເອກ

### ນິຍາມ

ຄໍາວ່າ "ສີລາເສົາເອກ" ກ່າວເຖິງຫີນຂະໜາດໃຫຍ່ ທີຖືກຕັດເປັນພິເສດແລະວາງໄວ້ຊີເສົາຂອງຮາກຖານຂອງອາຄານ.

- ຫີນອື່ນໆທັງໝົດຂອງອາຄານຈະຖືກແຫກແລະປູໄວ້ໃຫ້ຕິດກັບສີລາເສົາເອກນີ.
- ເປັນສິ່ງສໍາຄັນຫຼາຍສໍາລັບຄວາມແຂງແຮງແລະຄວາມໝັ້ນຄົງຂອງໂຄງສ້າງທັງໝົດ.
- ໃນພຣະຄໍາພີໃໝ່, ການຊຸມນຸມຂອງຜູ້ເຊື່ອປຽບກັບອາຄານທີມີພຣະເຢຊູເປັນ "ສີລາເສົາເອກ."
- ໃນລັກສະນະດຽວກັນທີສີລາເສົາເອກຂອງອາຄານຈະຄ້ໍາແລະກໍານົດຕໍາແໜ່ງຂອງອາຄານໝົດທັ້ງຫຼັງ,
  ດັ່ງນັ້ນພຣະເຢຊູຈຶ່ງເປັນສີລາເສົາເອກທີສໍາຄັນສໍາລັບການກໍ່ຕັ້ງ ແລະສະໜັບສະໜຸນການຊຸມນຸມຂອງຜູ້ເຊື່ອ.

#### ຄໍາແນະນໍາໃນການແປ

- ຄໍາວ່າ "ສີລາເສົາເອກ" ອາດແປວ່າ "ສີລາຫຼັກຂອງອາຄານ"

ຫຼື " ສີລາຮາກຖານ."

- ພິຈາລະນາວ່າພາສາເປົ້າໝາຍໃນການແປມີຄໍາສໍາລັບ

ສ່ວນທີເປັນຮາກຖານຂອງອາຄານທີເປັນສ່ວນຄ້ໍາຫຼັກຫຼືບໍ. ຖ້ໍາມີ, ໃຫ້ໃຊ້ຄໍານີໄດ້.

- ອີກວິທີໜຶ່ງໃນການແປຄໍານີຄື, "ສີລາຮາກຖານ" ທີໃຊ້ສໍາລັບເສົາຂອງອາຄານ."
- ສິ່ງທີສໍາຄັນຄືຕ້ໍອງຮັກສາຄວາມຈິງທີວ່ານີເປັນຫີນຂະ

ໜາດໃຫຍ່, ທີໃຊ້ເປັນວັດຖຸກໍ່ສ້າງທີແຂງແຮງແລະໝັ້ນຄົງ. ຖ້ໍາຫີນບໍ່ໄດ້ໃຊ້ສໍາລັບສ້ໍາງອາຄານ, ມີຄໍາອື່ນທີສາມາດນໍາມາໃຊ້ຊຶ່ງໝາຍຄວາມວ່ໍາ
"ຫີນຂະໜາດໃຫ່ຍ"


generated on Thu Jul 10 08:45:04 2025

## ສືບໄປເປັນນິດ, ນິດນິລັນດອນ

### ນິຍາມ

ໃນພຣະຄັມພີຄຳວ່າ "ສືບໄປເປັນນິດ" ບົ່ງບອກເຖິງເວລາທີ່ບໍ່ມີສິ້ນສຸດ.ບາງຄັ້ງຄຳນີ້ໃຊ້ໃນຮູບແບບປຽບທຽບທີ່ມີຄວາມໝາຍວ່າ ໃນເວລາທີ່ຍາວນານ.

- ຄຳວ່າ "ສືບໄປເປັນນິດ" ເນັ້ນວ່າບາງສິ່ງຈະຄົງຢູ່ສະເໝີ.
- ຄຳເວົ້າທີ່ວ່າ "ສືບໄປເປັນນິດ" ເປັນການສະແດງເຖິງວ່າຊີວິດນິຣັນດອນ ຫຼືນິຣັນດອນເປັນຢ່າງໃດ, ແລະແນວຄິດທີ່ວ່າເວລານັ້ນບໍ່ມີວັນສິ້ນສຸດ.
- ພຣະເຈົ້າໄດ້ບອກວ່າບັນລັງຂອງດາວິດຈະຄົງຢູ່ "ຕະຫຼອດໄປ" ຄຳນີ້ບົ່ງບອກເຖິງຄວາມຈິງທີ່ວ່າຫາຍາດຂອງດາວິດຄືພຣະເຢຊູຈະປົກຄອງເປັນກະສັດຕະຫຼອດໄປ.

### ຄຳແນະນຳໃນການແປ

- ຄຳນີ້ສາມາດແປໄດ້ອີກວ່າ "ສະເໝີ" ຫຼື "ບໍ່ມີທີ່ສິ້ນສຸດ".
- ປະໂຫຍກທີ່ວ່າ "ຈະຢູ່ຕະຫຼອດໄປເປັນນິດ" ສາມາດແປໄດ້ອີກວ່າ "ມີຢູ່ສະເໝີ" ຫຼື "ຈະບໍ່ມີວັນຢຸດ" ຫຼື "ຈະດຳເນີນຕໍ່ໄປ".
- ປະໂຫຍກໄດ້ເນັ້ນຢ້ຳທີ່ວ່າ, "ຕະຫຼອດໄປເປັນນິດນິຣັນດອນ" ສາມາດແປໄດ້ອີກວ່າ "ມີຢູ່ສະເໝີແລະສະເໝີໄປ" ຫຼື "ບໍ່ມີຈຸດຈົບ" ຫຼື "ທີ່ບໍ່ເຄີຍມີວັນສິ້ນສຸດ".
- ບັນລັງຂອງດາວິດມີຢູ່ສະເໝີໄປສາມາດແປໄດ້ອີກວ່າ "ຫາຍາດຂອງດາວິດຈະປົກຄອງເປັນນິດນິຣັນດອນ" ຫຼື "ຫາຍາດຂອງເຮົາຈະປົກຄອງຢູ່ສະເໝີໄປ".

## ສຸພາບອ່ອນຫວານ, ຄວາມສຸພາບອ່ອນຫວານ

### ນິຍາມ

ຄຳວ່າ "ສຸພາບອ່ອນຫວານ" ແມ່ນໃຊ້ອະທິບາຍເຖິງຄົນທີ່ສຸພາບອ່ອນໂຍນ, ຄົນນອບນ້ອມ , ແລະຍອມທົນເຮັດຕາມ ເຖິງວ່າຈະບໍ່ໄດ້ຮັບຄວາມຍຸດຕິທຳ. ຄວາມສຸພາບອ່ອນຫວານ ຄື ຄວາມສາມາດໃນການສະແດງຄວາມສຸພາບອອກມາ ໃນຂະນະທີ່ມີຄວາມຢາກຮ້າຍ ຫລືໃນເວລາທີ່ຖືກກົດດັນ ເຊິ່ງຕາມປົກກະຕິແລ້ວ ຈະສະແດງອອກມາໄດ້ຍາກ.

- ຄວາມສຸພາບອ່ອນຫວານ ມັກຈະກ່ຽວຂ້ອງກັບຄວາມຖ່ອມໃຈ.
- ຄຳນີ້ ສາມາດແປໄດ້ອີກວ່າ "ສຸພາບ" ຫລື "ມາລະຍາດສຸພາບ" ຫລື "ອາລົມອ່ອນໂຍນ."
- ຄຳວ່າ "ຄວາມສຸພາບອ່ອນຫວານ" ສາມາດແປໄດ້ອີກວ່າ "ສຸພາບອ່ອນໂຍນ" ຫລື "ຖ່ອມໃຈ."

## ສຸພາສິດ

### ນິຍາມ

ສຸພາສິດເປັນເປັນຄຳກ່າວສັ້ນໆ ທີ່ສະແດງເຖິງສະຕິປັນຍາຫລືຄວາມຈິງ

- ສຸພາສິດມີອິດທິພົນເພາະມັນງ່າຍຕໍ່ການຈົດຈຳແລະທ່ອງຊ້ຳ
- ຫລາຍເທື່ອສຸພາສິດທັ້ງຫມົດເອົາຕົວຢ່າງຈາກຊີວິດປະຈຳວັນທີ່ໃຊ້ໄດ້ຈິງ
- ສຸພາສິດບາງຂໍ້ນັ້ນຊັດເຈນແລະກົງ ໃນຂະນະທີ່ຄຳອື່ນໆ ນັ້ຍຍາກກວ່າທີ່ຈະເຂົ້າໃຈ
- ກະສັດຊາໂລມອັນເປັນທີ່ຮູ້ຈັກເພາະສະຕິປັນຍາຂອງພະອົງແລະໄດ້ຂຽນສຸພາສິດຫລາຍກວ່າ 1,000 ຂໍ້ຄວາມ
- ຫລາຍເທື່ອທີ່ພຣະເຢຊູໃຊ້ຄຳສຸພາສິດຫລືອຸບປະມາເມື່ອພະອົງຊົງສອນປະຊາຊົນ
- ວິທີທີ່ຈະແປຄຳວ່າ"ສຸພາສິດ"ສາມາດລວມທັ້ງຫມົດເຖິງ"ການເວົ້າທີ່ສະຫລາດ" ຫລື"ຖ້ອຍຄຳຄວາມຈິງ"

## ສຸໂຄດ

### ຂໍ້ເທັດຈິງ

ສຸໂຄດ ແມ່ນຊື່ຂອງສອງຕົວເມືອງໃນພຣະຄຳພີເດີມ. ຄຳວ່າ "ສຸໂຄດ" (ຫຼື "ສຸກໂຄດ") ໝາຍຄວາມວ່າ "ບ່ອນພັກອາໄສ".

- ເມືອງທຳອິດທີ່ມີຊື່ວ່າ ສຸໂຄດ ຕັ້ງຢູ່ທາງທິດຕາເວັນອອກຂອງແມ່ນ້ຳຈໍແດນ.


generated on Thu Jul 10 08:45:04 2025

- ຢາໂດຍໄດ້ພັກເຊົາຢູ່ທີ່ເມືອງສຸໂຄດພ້ອມດ້ວຍຄອບຄົວແລະຝູງສັດລ້ຽງຂອງລາວ,
  ເຊິ່ງພວກເຂົາໄດ້ສ້າງທີ່ພັກອາໄສໃຫ້ຂອງພວກເຂົາຢູ່ທີ່ນັ້ນ.
- ຫຼາຍຮ້ອຍປີຕໍ່ມາ, ກິເດໂອນແລະພ້ອມດ້ວຍເຫລົ່າທະຫານທີ ເໝື່ອຍລ້າແລະໝົດແຮງ ພວກເຂົາໄດ້ຢຸດພັກຢູ່ທີ່ເມືອງ ສຸໂຄດ
  ໃນຂະນະທີ່ພວກເຂົາກໍາລັງໄລ່ຕາມຊາວ ມີດີອານ, ແຕ່ປະຊາຊົນຢູ່ທີ່ນັ້ນໄດ້ປະຕິເສດທີ່ຈະເອົາອາຫານໃດໆໃຫ້ພວກເຂົາກິນ.
- ເມືອງສຸໂຄດທີ່ສອງຕັ້ງຢູ່ຊາຍແດນທາງເໜືອຂອງອີຢິບແລະເປັນສະຖານທີ່ແຫ່ງໜຶ່ງທີ່ຊາວອິດສະລາແອນຢຸດພັກເຊົາຫຼັງຈາກທີ່ພວກເຂົາໄດ້ເດີນທາງຂ້າມ

## ສູນເສຍໄປ, ທີ່ດິນທີ່ປະຖິ້ມໄວ້

### ນິຍາມ

ການຖິ້ມສິ່ງຂອງໃດໆ ໝາຍເຖິງການໂຍນຂອງຖິ້ມຫລືໃຊ້ຍ່າງບໍ່ລະມັດລະວັງບາງສິ່ງທີ່ຈໍາເປັນ " ທີ່ດິນທີ່ປະຖິ້ມໄວ້ " ຫລື " ຂອງເສຍຫາຍ "
ອ້າງເຖິງແຜ່ນດິນຫລືເມືອງທີ່ຖືກທໍາລາຍ ດັ່ງນັ້ນຈຶ່ງບໍ່ມີສິ່ງທີ່ມີຊີວິດອີກຕໍ່ໄປ

- ຄໍາເວົ້າວ່າ " ສູນເສຍໄປ " ເປັນຄໍາເວົ້າທີ່ມີຄວາມໝາຍວ່າການເຈັບປ່ວຍທີ່ຫລືຖືກທໍາລາຍ ເຮັດໃຫ້ສູນເສຍສຸຂ
  ພາບແລ້ວຈະຄ່ອຍຈ່ອຍຜອມລົງຫລາຍເພາະໂລກແລະຂາດອາຫານ
- ການ " ສູນເສຍ " ເມືອງຫລືແຜ່ນດິນ ໝາຍຄວາມວ່າຖືກທໍາລາຍມັນ
- ອີກຄໍາເວົ້າໜຶ່ງຂອງຄໍາທີ່ວ່າ " ທີ່ດິນທີ່ປະຖິ້ມໄວ້ " ສາມາດເປັນ " ທະເລຊາຍ " ຫລື " ຖິ້ນທຸລະກັນດານ "
  ແຕ່ທີ່ດິນທີ່ຖິ້ມປະຣ້າງໄວ້ສະແດງວ່າປະຊາຊົນເຄີຍອາໃສຢູ່ເຄີຍມີຕົ້ນໄມ້ແລະຕົ້ນພືດທີ່ເປັນອາຫານໄດ້ດ້ວຍ

## ສິ່ງ, ສິ່ງອອກ, ໄດ້ສິ່ງ

### ນິຍາມ

ການ"ສິ່ງ"ແມ່ນເຮັດໃຫ້ບາງຄົນຫລືບາງສິ່ງບາງຢ່າງໄປບ່ອນໃດບ່ອນ ໜຶ່ງ.ການທີ່ຈະ
"ສິ່ງອອກ"ຜູ້ໃດຜູ້ໜຶ່ງແມ່ນເພື່ອບອກຄົນນັ້ນໃຫ້ໄປເຮັດວຽກຫຼືພາລະກິດ.

- ປົກກະຕິແລ້ວຜູ້ທີ່ຖືກ "ສິ່ງອອກ" ໄດ້ຖືກແຕ່ງຕັ້ງໃຫ້ເຮັດວຽກງານສະເພາະ.
- ປະໂຫຍກທີ່ຄ້າຍຄື "ສິ່ງຝົນ" ຫຼື "ສິ່ງໄພພິບັດ" ໝາຍຄວາມວ່າ "ເຮັດໃຫ້ເກີດ ... ມາ." ການສະແດງອອກແບບນີ້ມັກຈະຖືກ ນໍາ
  ໃຊ້ໃນການອ້າງອີງເຖິງພຣະເຈົ້າເຮັດໃຫ້ສິ່ງເຫລົ່ານີ້ເກີດຂຶ້ນ.
- ຄໍາວ່າ"ສິ່ງ"ຍັງຖືກໃຊ້ໃນການສະແດງອອກເຊັ່ນ"ສິ່ງຄໍາສັ່ນ" ຫຼື "ສິ່ງຂ້ຄວາມ"
  ເຊິ່ງໝາຍຄວາມວ່າຈະສິ່ງຂ້ຄວາມໃຫ້ຜູ້ໃດຜູ້ໜຶ່ງເພື່ອບອກຄົນອື່ນ.
- ເພື່ອ"ສິ່ງ"ໃຫ້"ຄົນ"ກັບ"ບາງສິ່ງບາງຢ່າງສາມາດໝາຍຄວາມວ່າ" ໃຫ້ "ສິ່ງນັ້ນ" ກັບ "ຄົນອື່ນ,
  ໂດຍປົກກະຕິຍົກຍ້າຍສິ່ງຂອງຢູ່ໄລຍະຫ່າງບາງຢ່າງເພື່ອໃຫ້ຄົນໄດ້ຮັບມັນ.
- ພຣະເຢຊູໃຊ້ ຄໍາເວົ້າທີ່ວ່າ“ ຜູ້ທີ່ໄດ້ສິ່ງຂ້ອຍມາເລື່ອຍໆ” ເພື່ອກ່າວເຖິງພຣະເຈົ້າພຣະບິດາຜູ້ທີ“ ສິ່ງ”
  ພຣະອົງລົງມາເທິງແຜ່ນດິນໂລກເພື່ອໄຖ່ແລະຊ່ວຍມະນຸດໃຫ້ລອດ. ນີ້ຍັງສາມາດແປເປັນ, "ມອບໝາຍໜ້າທີ່ໃຫ້ເຮົາ" ຫລື
  "ເປັນຕົ້ນເຫດໃຫ້ເຮົາມາ" ຫຼື "ແຕ່ງຕັ້ງເຮົາໃຫ້ໄປ."

## ສຽງ

### ນິຍາມ

ຄໍາວ່າ "ສຽງ" ຫລາຍຄັ້ງມັກໃຊ້ໃນທາງປຽບທຽບເພື່ອອ້າງເຖິງການເວົ້າຫລືການສື່ສານບາງຢ່າງ.

- ພຣະເຈົ້າກ່າວວ່າ, ພຣະອົງຊົ່ງໃຊ້ສຽງຂອງພຣະອົງເຖິງແມ່ນພຣະອົງຈະບໍ່ມີສຽງເໝືອນຢ່າງທີ່ມະນຸດ.
- ຄໍານີ້ສາມາດໃຊ້ທີ່ອ້າງເຖິງ ຄົນທັ້ງຕົວ, ຢ່າງໃນຂ້ຄວາມທີ່ວ່າ "ສຽງໃນທະເລຊາຍກ່າວວ່າ, 'ຈົ່ງຕຽມທາງຂອງອົງພຣະຜູ້ເປັນເຈົ້າ.'"
  ເຊິ່ງອາດແປວ່າ" ບຸກຄົນໄດ້ຍິນສຽງກໍາລັງເອີ້ນໃນທະເລຊາຍ...."
- ການ "ໄດ້ຍິນສຽງບາງຄົນ" ສາມາດແປໄດ້ວ່າ "ໄດ້ຍິນບາງຄົນກໍາລັງເວົ້າວ່າ."
- ບາງເທື່ອຄໍາວ່າ "ສຽງ" ອາດໃຊ້ສໍາລັບວັດຖຸທີ່ບໍ່ສາມາດເວົ້າຕາມຕົວອັກສອນ ເຊັ່ນເມື່ອດາວິດ
  ບັນລະຍາຍໃນພຣະທໍາເພງສັນລະເສີນຫລາຍໆ ບົດວ່າ "ສຽງ" ຂອງສະຫວັນໄດ້ປະກາດງາມຍິ່ງໃຫຍ່ຂອງພຣະເຈົ້າ.
  ນີ້ສາມາດແປໄດ້ວ່າ "ຄວາມງົດງາມຂອງພວກມັນສະແດງໃຫ້ເຫັນຢ່າງຊັດເຈນວ່າພຣະເຈົ້າຊົ່ງຍິ່ງໃຫຍ່ຢ່າງໃດ."


generated on Thu Jul 10 08:45:04 2025

## ສ້າງ, ການສ້າງ, ພຣະຜູ້ສ້າງ

### ນິຍາມ

ຄໍາວ່າ "ສ້າງ" ໝາຍເຖິງການເຮັດສິ່ງໃດສິ່ງໜຶ່ງ, ຫຼືເຮັດໃຫ້ສິ່ງໃດໜຶ່ງເກີດຂຶ້ນ. ສິ່ງໃດສິ່ງໜຶ່ງທີ່ຖືກສ້າງຂຶ້ນນັ້ນເອີ້ນວ່າ "ສິ່ງທີ່ຊົງສ້າງ." ພຣະເຈົ້າຖືກເອີ້ນວ່າ "ພຣະຜູ້ສ້າງ" ເພາະອົງໄດ້ຊົງໃຫ້ທຸກສິ່ງໃນຈັກກະວານທັງໝົດເກີດມີຂຶ້ນ.

- ເມື່ອຄໍານີ້ໃຊ້ເພື່ອອ້າງເຖິງ ພຣະເຈົ້າສ້າງໂລກ, ໝາຍຄວາມວ່າ

ພຣະອົງເຮັດໃຫ້ມັນເກີດ ຈາກທີ່ບໍ່ມີສິ່ງໃດໆເລີຍ.

- ເມື່ອມະນຸດ "ສ້າງ" ສິ່ງໃດໜຶ່ງ, ໝາຍຄວາມວ່າພວກເຂົາສ້າງໃຫ້ມັນອອກມາຈາກສິ່ງທີ່ມີຢູ່ແລ້ວ.
- ບາງຄັ້ງ "ສ້າງ" ໃຊ້ເປັນຫໍານອງປຽບທຽບເພື່ອອະທິບາຍສິ່ງເປັນນາມມະຫໍາ, ເຊັ່ນການສ້າງສັນຕິພາບ ຫຼື ສ້າງຫົວໃຈທີ່ບໍຣິສຸດໃນຄົນ.
- ຄໍາວ່າ "ການສ້າງ" ສາມາດກ່າວເຖິງຈຸດເລີ່ມຕົ້ນຕອນທໍາອິດ

ຂອງໂລກເມື່ອພຣະເຈົ້າຊົງສ້າງທຸກສິ່ງຂຶ້ນເປັນຄັ້ງທໍາອິດ. ນອກຈາກນີ້ຍັງສາມາດໃຊ້ເພື່ອອ້າງເຖິງທຸກຢ່າງທີ່ພຣະເຈົ້າຊົງ ສ້າງ. ໂດຍທົ່ວໄປບາງຄັ້ງຄໍາວ່າ "ສິ່ງຊົງສ້າງ" ກ່າວເຖິງສະເພາະຜູ້ຄົນໃນໂລກເທົ່ານັ້ນ.

### ຄໍາແນະນໍາໃນການແປ

- ບາງພາສາອາດຈະເວົ້າໂດຍຕົ່ງ ວ່າພຣະເຈົ້າຊົງສ້າງໂລກ "ຈາກທີ່ບໍ່ມີຫຍັງເລີຍ" ເພື່ອໃຫ້ແນ່ໃຈວ່າ ຄວາມໝາຍນີ້ຊັດເຈນ.
- ຄໍາເວົ້າ "ຕັ້ງແຕ່ການສ້າງ" ໝາຍເຖິງ, "ນັບແຕ່ພຣະເຈົ້າສ້າງ

ໂລກ."

- ຄໍາເວົ້າທີ່ຄືກັນ, "ໃນຕອນທໍາອິດຂອງການຊົງສ້າງ" ອາດແປວ່າ,

" ເມື່ອພຣະເຈົ້າຊົງສ້າງໂລກໃນຕອນຕົ້ນຂອງເວລາ" ຫຼື "ເມື່ອໂລກນີ້ຖືກສ້າງຂຶ້ນຄັ້ງທໍາອິດ."

- ການປະກາດຂ່າວປະເສີດ "ແກ່ຄົນທັ້ງໝົດທຸກແຫ່ງຫົວໂລກ."
- ຄໍາເວົ້າ "ໃຫ້ສິ່ງຊົງສ້າງທັ້ງສິ້ນຍິນດີ."
- "ສ້າງອາດແປວ່າ, " ເຮັດ " ຫຼື " ເຮັດໃຫ້ເກີດ" ຫຼື "ທໍາໃຫ້ອອກມາ

ຈາກທີ່ບໍ່ມີຫຍັງເລີຍ." ທັ້ງນີ້ຂຶ້ນຢູ່ກັບສະພາບການນັ້ນໆ

- ຄໍາວ່າ "ພຣະຜູ້ສ້າງ" ອາດແປວ່າ, "ອົງດຽວຜູ້ສ້າງທຸກສິ່ງ"

ຫຼື "ພຣະເຈົ້າຜູ້ຊົງສ້າງໂລກທັ້ງໝ່ວຍ."

- ຄໍາເວົ້າເຊັ່ນ "ພຣະຜູ້ສ້າງຂອງທ່ານ" ອາດແປວ່າ, "ພຣະຜູ້ຊົງສ້າງທ່ານ."

## ຫນ້າກຽດ ,ກຽດຊັ່ງ

### ນິຍາມ

ຄໍາວ່າ"ຫນ້າກຽດ"ອະທິບາຍ ເຖິງສິ່ງທີ່ບໍ່ຄວນ ແລະຖືກປະຕິເສດ ການ"ກຽດຊັ່ງ" ບາງສິ່ງ ຫມາຍເຖິງ ການບໍ່ມັກຢ່າງຮຸນແຮງ.

- ຫລາຍຄັ້ງ ທີ່ພຣະຄໍາພີເວົ້າເຖິງ ຄວາມຊົ່ວຮ້າຍ ທີ່ຫນ້າເບື່ອ ນັ້ນ ຫມາຍເຖິງ ການບໍ່ມັກຫລື ປະຕິເສດ ຄວາມຊົ່ວຮ້າຍ.
- ພຣະເຈົ້າ ຊົງໄດ້ໃຊ້ ຄໍາວ່າ "ຫນ້າກຽດ" ເພື່ອອະທິບາຍການປະຕິບັດຊົ່ວຮ້າຍ ຂອງຜູ້ນະມັດສະການ ທຽມເທັດ.
- ຊາວອິດສະຣາເອນ ໄດ້ຮັບຄໍາສັ່ງໃຫ້ "ກຽດຊັ່ງ" ການກະທໍາຜິດບາບ ແລະຜິດສິນລະທັມ ຊຶ່ງກຸ່ມເພື່ອນບ້ານ ບາງກຸ່ມໄດ້ປະຕິບັດກັນຢູ່.
- ພຣະເຈົ້າ ຊົງໄດ້ເອີ້ນ ການກະທໍາທາງເພດທີ່ຜິດໆ ທັ້ງຫມົດວ່າ

"ຫນ້າກຽດ". .ການທໍານວຍເວດມົນ ຫມໍຜີ ແລະການບູຊາເດັກ ເປັນເລື່ອງ ຫນ້າລັ່ງກຽດຕໍ່ພຣະເຈົ້າ.

- ຄໍາວ່າ "ຫນ້າກຽດ"ອາດແປວ່າ" ປະຕິເສດຢ່າງແນ່ນອນ " ຫລື


generated on Thu Jul 10 08:45:04 2025

"ກຽດ"ຫລື ອາດຖືກແປເປັ່ນ "ຄວາມຊົ່ວຮ້າຍແຮງ" ຫລື "ຫນ້າກຽດຊັ່ງ" ຫລື "ຖືວ່າບໍ່ດີທີ່ສຸດ".

- ເມື່ອຖືກນໍາມາໃຊ້ ກັບຄົນຊອບທັມ "ຫນ້າລັ່ງກຽດຕໍ່" ຄົນຊົ່ວຮ້າຍ ສິ່ງນີ ອາດແປວ່າ "ຖືວ່າບໍ່ເປັ່ນທີ່ພໍໃຈຢ່າງຍິ່ງຕໍ່" ຫລື "ບໍ່ພໍໃຈ" ຫລື "ຖືກປະຕິເສດໂດຍ"
- ພຣະເຈົ້າ ໄດ້ກ່າວກັບ ຊາວອິດສະຣາເອນໃຫ້"ກຽດຊັ່ງ" ສັດບາງຊະນິດທີ່ພຣະເຈົ້າ ຊົງໄດ້ປະກາດວ່າ "ສິ່ກກະປົກ" ແລະບໍ່ເຫມາະ

ສໍາຫລັບເຮັດເປັ່ນອາຫານ ນີ້ຍັງອາດແປວ່າ "ບໍ່ມັກຢ່າງຍິ່ງ" ຫລື "ປະຕິເສດ" ຫລື "ຖືວ່າເປັ່ນທີ່ຍອມຮັບບໍ່ໄດ້.

## ຫລອກລວງ, ຄວາມບໍ່ຈິງ, ເລ່ກົນ, ການຫລອກລວງ ເຂົ້າໃຈຜິດງ່າຍ

### ນິຍາມ

ຄໍາວ່າ "ຫລອກລວງ" ໝາຍເຖິງ ເຮັດໃຫ້ຄົນອື່ນເຊື່ອ ສິ່ງທີ່ບໍ່ເປັ່ນຄວາມຈິງ ການກະທໍາທີ່ຫລອກລວງ ບາງຄົນເອີ່ນວ່າ "ຫລອກລວງ"

- ຄໍາວ່າ "ການຫລອງລວງ" ອີກຄໍາໜຶ່ງ ອ້າງເຖິງການກະທໍາ ທີ່ເຮັດໃຫ້ບາງຄົນເຊື່ອ ສິ່ງທີ່ບໍ່ເປັ່ນຄວາມຈິງ.
- ຄົນທີ່ເຮັດໃຫ້ຄົນອື່ນໆ ເຊື່ອ ສິ່ງທີ່ບໍ່ຖືກຕ້ອງຄື " ຜູ້ຫລອກລວງ" ຕົວຢ່າງເຊ້ັ່ນ,ຊາຕານເອີ່ນວ່າ " ຜູ້ຫລອກລວງ" ວິນຍານຊົ່ວຮ້າຍ" ທີ່ ມັ່ນຄວບຄຸມ ເປັ່ນຜູ້ຫລອກລວງນໍາດ້ວຍ.
- ບຸກຄົນໃດໆ ທີ່ເຮັດ ຫລື ໃຫ້ຂ່າວສານ ທີ່ບໍ່ເປັ່ນຄວາມຈິງ ສາມາດເວົ້າໄດ້ວ່າ " ເຮັດໃຫ້ຄົນເຂົ້າໃຈຜິດ"
- ຄໍາວ່າ " ຫລອກລວງ" ແລະ "ການຫລອກລວງ" ມີຄວາມ

ຫມາຍເໝືອນກັ່ນ ແຕ່ມີຄວາມແຕກຕ່າງເລັກນ້ອຍ ໃນວິທີໃຊ້.

- ຄໍາອະທິບາຍວ່າ " ຄວາມບໍ່ຈິ" ແລະ"ເລ້ກົນ" ມີຄວາມໝາຍເໝືອນກັ່ນ ແລະ ໃຊ້ໃນກໍຣະນີດຽວກັ່ນ.

%ຄໍາແນະນໍາໃນການແປ

- ການແປ " ຫລອກລວງ" ອາດລວມເຖິງ ຂີ້ຕົວະ ຫລື " ເຮັດໃຫ້ເກີດຄວາມເຂົ້າໃຈຜິດ" ຫລື "ຂີ້ຕົວະ" ຫລື "ເລ້ກົນ" ຫລື "ເຮັດໃຫ້ໂງ່" ຫລື "ຫລົ່ງຜິດ".
- " ຜູ້ທີ່ຕົວະ" ອາຈແປໄດ້ວ່າ " ຄົນຂີ້ຕົວະ" ຫລື " ທໍາໃຫ້ເກີດຄວາມຜິດ" ຫລື "ຄົນຫລອກລວງ".
- ຄໍາວ່າ " ການຫລອກລວງ" ຫລື " ຄວາມບໍ່ຈິງ " ອາຈແປດ້ວຍຄໍາ ຫລື ຄໍາເວົ້າ ທີ່ວ່າ " ຄວາມບໍ່ຈິງ" ຫລື"ຫລອກລວງ"ຫລື (ກົນລວງ" ຫລື "ບໍ່ສັດຊື" ທັ້ງນີ້ຂຶ້ນຢູ່ກັບບໍລິບົດນັ້ນໆ.
- ຄໍາວ່າ "ການຫລອກລວງ"ຫລື "ຄວາມບໍ່ຈິງ"ອາດແປໄດ້ວ່າ

"ຄວາມບໍ່ຈິງ" ຫລື ເຮັດໃຫ້ເຂົ້າໃຈຜິດ" ຫລື "ຫລອກລວງ" ເພື່ອອະທິບາຍບຸກຄົນ ທີ່ເວົ້າ ຫລື ກະທໍາໃນລັກສະນະ ທີ່ຫເຮັດໃຫ້ຄົນອື່ນເຊື່ອ ໃນສິ່ງທີ່ບໍ່ເປັ່ນຄວາມຈິງ.

## ຫລອມລະລາຍ, ຖືກຫລອມລະລາຍ

### ນິຍາມ

ຄໍາວ່າ "ຫລອມລະລາຍ" ແມ່ນບົ່ງບອກເຖິງບາງສິ່ງທີ່ຖືກຄວາມຮ້ອນເຮັດໃຫ້ເປ່ືອຍຈົນກາຍເປັ່ນຄືນ້ໍາ.
ມັ່ນຖືກໃຊ້ໃນລັກສະນະຂອງຄໍາອຸປະມາຄືກັ່ນ. ສິ່ງທີ່ຖືກຫລອມຈົນເປ່ືອຍ ຈະເອີ່ນວ່າ "ຖືກຫລອມລະລາຍ."

- ເຫລັກທີ່ຊະນິດແຕກຕ່າງກັ່ນ ຈະໃຊ້ຄວາມຮ້ອນທີ່ຕ່າງກັ່ນເພື່ອເຮັດໃຫ້ມັ່ນເປ່ືອຍ ແລະສາມາດຖອກໃສ່ແມ່ແບບຕາມຄວາມຕ້ອງການ ເພື່ອເຮັດເປັ່ນຊິ້ນງານຕ່າງໆ ເຊ້ັ່ນ ອາວຸດ ຫລື ຮູບເຄົ່າລ້ົ. ປະໂຫຍກທີ່ເວົ້າວ່າ "ເຫລັກທີ່ຖືກລະລາຍຈົນເປ່ືອຍ" ແມ່ນບົ່ງບອກເຖິງເຫລັກທີ່ຖືກຫລອມລະລາຍແລ້ວ.
- ເວລາໄຕ້ຫງັນ ຂີ້ເຜ້ົງທີ່ເປ່ັນຫງັນ ຈະຄ່ອຍໆ ລະລາຍ ແລະໄຫລຍ້ອຍລົ່ງ. ໃນສະໄໝບູຮານ ຈະຕິດປ່າກຊອງຈົດໝາຍ ໂດຍ, ຫຍອດຂີ້ເຜ້ົງໜ້ອຍໜຶ່ງໃສ່ປ່າກຊອງຈົດໝາຍ.
- ຄໍາອຸປະມາທີ່ໃຊ້ຄໍາວ່າ "ຫລອມລະລາຍ" ໝາຍຄວາມວ່າ ໄດ້ກາຍເປ່ັນສິ່ງທີ່ອ່ອນແຫລວແລະອ່ອນແອ, ຄ້າຍຄືກັ່ບຂີ້ເຜ້ົງທີ່ລະລາຍແລ້ວ.
- ປະໂຫຍກທີ່ວ່າ "ຫົວໃຈຂອງພວກເຂົ່າຈະຖືກຫລອມລະລາຍ," ໝາຍຄວາມວ່າ ພວກເຂົ່າຈະກາຍເປ່ັນຄົນທີ່ອ່ອນແອຫລາຍ ຍ້ອນຄວາມຢ້ານກົວ.
- ມີປະໂຫຍກຄໍາອຸປະມາອື່ນອີກ ເຊ້ັ່ນ, "ພວກເຂົ່າຈະລະລາຍ ໄປ" ໝາຍຄວາມວ່າ ພວກເຂົ່າຈະຖືກບັ່ງຄັ່ບໃຫ້ໜີໄປ ຫລື ພວກເຂົ່າຈະສະແດງຄວາມອ່ອນແອອອກມາ ແລະຈະໜີໄປໃນຄວາມພ່າຍແພ້.
- ຄວາມໝາຍຕາມໂຕອັກສອນຂອງຄໍາວ່າ "ຫລອມລະລາຍ" ສາມາດແປໄດ້ວ່າ "ຈົ່ນອ່ອນແຫລວ" ຫລື "ຖືກເຮັດຈົ່ນອ່ອນແຫລວ" ຫລື "ເປ່ັນຕົ່ນເຫດໃຫ້ກາຍເປ່ັນອ່ອນແຫລວ."


generated on Thu Jul 10 08:45:04 2025

- ວິທີທາງອື່ນອີກທີ່ຈະແປຄວາມໝາຍໃນລັກສະນະເປັນຄຳອຸປະມາຂອງຄຳວ່າ "ຫລອມລະລາຍ" ສາມາດແປອີກວ່າ "ກາຍເປັນອ່ອນນຸ້ມ" ຫລື "ກາຍເປັນອ່ອນແອ" ຫລື "ໄດ້ຮັບຄວາມຜ່ອນແຜ."

## ຫລັກຄຳສອນ

### ນິຍາມ

ຄຳວ່າ"ຫລັກຄຳສອນ" ຕາມຕົວອັກສອນຫມາຍເຖິງ "ການສອນ"ມັກກ່າວເຖິງການສອນທາງສາດສະຫນາ.

- ໃນບໍຣິບົດ ຄຳສອນຂອງ "ຄຣິດສະຕຽນ"ອ້າງເຖິງຄຳສອນ ທັ້ງຫມົດ ກ່ຽວກັບພຣະເຈົ້າ-ພຣະບິດາ ພຣະບຸດແລະພຣະວິນຍານບໍຣິສຸດ- ລວມທັ້ງຄຸນລັກສະນະ ຂອງພຣະອົງ ທັ້ງຫມົດ ແລະທຸກສິ່ງທີ່ພຣະອົງຊົງໄດ້ກະທຳ.
- ນອກຈາກນີ ຍັງກ່າວເຖິງ ທຸກສິ່ງທີ່ພຣະເຈົ້າຊົງຄຣິດສະຕຽນ ກ່ຽວກັບການດຳເນີນ ຢ່າງບໍຣິສຸດ ຊີວິດທີ່ນຳສະຫງ່າລາສີມາສູ່ພຣະອົງ ດວ້ຍ.
- ຄຳວ່າ "ຫລັກຄຳສອນ"ບາງຄັ້ງກໍໃຊ້ ເພື່ອອ້າງເຖິງ ຄຳສອນທີ່ຜິດໆ ຫລື ຄຳສອນສາດສະຫນາ ທາງໂລກ ທີ່ມາຈາກມະນຸດ ເປັງ

ບໍຣິບົດ ທີ່ຈະຊ່ວຍເຮັດໃຫ້ ຄວາມຫມາຍຊັດເຈ້ນ.

## ຫວ່ານ, ຜູ້ຫວ່ານ, ປູກ

### ນິຍາມ

ການ "ຫວ່ານ" ໝາຍເຖິງການໃສ່ເມັດລົງໄປໃນດິນເພື່ອທີ່ຈະປູກພືດ. ຄຳວ່າ "ຜູ້ຫວ່ານ" ຄືບຸກຄົນທີ່ຫວ່ານຫລືປູກເມັດ.

- ວິທີການຫວ່ານຫລືການປູກນັ້ນແຕກຕ່າງກັນ, ແຕ່ມີວິທີໜຶ່ງທີ່ຄືກັນຄືເອົາເມັດມາແລະກະຈາຍລົງໄປເທິງພື້ນດິນ.
- ອີກວິທີໜຶ່ງຂອງການປູກເມັດຄືການຂຸດຂຸມໃນດິນແລະໃສ່ເມັດລົງໄປໃນແຕ່ລະຂຸມ.
- ຄຳວ່າ "ຫວ່ານ" ສາມາດໃຊ້ເປັນຄຳປຽບທຽບໄດ້ວ່າ, "ບຸກຄົນຈະເກັບກ່ຽວໃນສິ່ງທີ່ຫ່ານຫວ່ານໄວ້" ນີໝາຍຄວາມວ່າຖ້າບຸກຄົນເຮັດຊົ່ວຫ່ານເອງຈະໄດ້ຮັບຜົນຊົ່ວນັ້ນ. ແລະຖ້າບຸກຄົນເຮັດດີຕໍ່ຄົນອື່ນ, ຫ່ານເອງຈະໄດ້ຮັບຜົນທີ່ດີ.

## ຫອກ

### ນິຍາມ

ຫອກເປັນອາວຸດຊະນິດທີ່ຍາວມີດ້ານເປັນໄມ້ແລະເປັນເຫລັກທີ່ແຫລມຄົມທີ່ປາຍດ້ານໜຶ່ງຊຶ່ງໃຊ້ຊັດອອກໄປໄກໄດ້.

- ຫອກຖືກໃຊ້ກັນຢ່າງແຜ່ຫລາຍໃນສົງຄາມໃນສະໄໝຂອງພຣະຄຳພີ. ຫອກຍັງຄົງໃຊ້ຈົນເຖິງປະຈຸບັນໃນທີ່ມີຄວາມຂັດແຍ້ງລະຫວ່າງບາງກຸ່ມ.
- ທະຫານໂຣມັນໄດ້ໃຊ້ຫອກໃນການແທງສີຂ້າງຂອງພຣະເຢຊູໃນຂະນະທີ່ພຣະອົງຖືກຄຶງທີ່ເທິງໄມ້ກາງແຂນ
- ບາງເທື່ອຄົນຍັງໃຊ້ຫອກໃນການຫາປາຫລືສັດອື່ນໆ ເພື່ອເປັນອາຫານ.
- ອາວຸດທີ່ຄ້າຍຄືກັນໄດ້ແກ່ "ຫວນ" ຫລື "ຫລາວ."
- ໃຫ້ແນ່ໃຈວ່າການແປ ຄຳວ່າ "ຫອກ" ແຕກຕ່າງຈາກການແປຄຳວ່າ "ດາບ" ຊຶ່ງເປັນອາວຸດທີ່ໃຊ້ສຳລັບຈີມຫລືແທງບໍ່ແມ່ນແກວ່ງ, ດາບຍັງມີດ້ານຈັບທີ່ຍາວ ຂະນະທີ່ຫອກມີໃບມີດນ້ອຍໆ ຢູ່ທີ່ປາຍດ້ານ.

## ຫັນ,ຫັນໜີ,ຫັນກັບມາ

### ນິຍາມ

ການ "ຫັນ" ໝາຍເຖິງການປ່ຽນທິດທາງທາງກາຍະພາບຫລືເຮັດໃຫ້ເກີດສິ່ງອື່ນເພື່ອປ່ຽນທິດທາງ.

- ຄຳວ່າ "ຫັນ" ສາມາດໝາຍເຖິງ "ຫັນໄປອ້ອມຮອບ" ເພື່ອແນມຂ້າງຫລັງຫລືຫັນໜ້າໄປທິດທາງທີ່ຕ່າງໄປ.
- ການ "ຫັນກັບ"ຫລື "ໜີໄປ" ໝາຍຄວາມວ່າ "ກັບໄປ" ຫລື "ຈາກໄປ" ຫລື "ເຮັດໃຫ້ບາງຄົນໜີໄປ."
- "ຫັນໄປຈາກ" ສາມາດໝາຍເຖິງ "ຢຸດ" ເຮັດຫຍັງບາງຢ່າງຫລືເພື່ອປະຕິເສດບາງຄົນ.
- ການ "ຫັນໄປທາງ" ບຸກຄົນໃດໆ ໝາຍເຖິງການເບິ່ງກົງໄປທີ່ບຸກຄົນນັ້ນ.
- ການ "ຫັນແລະອອກຈາກ" ຫລື "ຫັນຫລັງອອກໄປ" ໝາຍເຖິງ "ອອກໄປ."
- ເພື່ອ "ຫັນກັບມາ" ໝາຍເຖິງ "ເລີ່ມເຮັດບາງສິ່ງອີກເທື່ອໜຶ່ງ."


generated on Thu Jul 10 08:45:04 2025

"ຫັນເຫໄປຈາກ" ໝາຍເຖິງ "ຢຸດເຮັດຫຍັງບາງຢ່າງ."

### ຄຳແນະນຳໃນການແປ

- ຂຶ້ນຢູ່ກັບບໍລິບົດ ຄຳວ່າ"ຫັນ" ສາມາດແປເປັນ "ປ່ຽນແປງທິດທາງ" ຫລື "ໄປ" ຫລື "ຍ້າຍ."
- ໃນບາງບໍລິບົດ "ຫັນ" ສາມາດແປວ່າ "ເປັນເຫດ."

## ຫາຍໃຈ, ລົມຫາຍໃຈ

### ນິຍາມ

ໃນພຣະຄຳພີ, ຄຳວ່າ "ລົມຫາຍໃຈ" ແລະ "ຫາຍໃຈ" ມັກຖືກນຳ ໃຊ້ເປັນຕົວຢ່າງເພື່ອປຽບທຽບກັບການໃຫ້ຊີວິດຫລືການມີຊີວິດ.

- ພຣະຄຳພີສອນວ່າພຣະເຈົ້າໄດ້ເປົ່າລົມ“ ຫາຍໃຈເຂົ້າ” ໃຫ້ແກ່ອາດາມ. ຫລັງຈາກຈຸດນັ້ນອາດາມກາຍເປັນຈິດວິນຍານທີ່ມີຊີວິດຢູ່.
- ໃນເວລາທີ່ພຣະເຢຊູປະທານລົມໃສ່ພວກສາວົກແລະບອກພວກເຂົາໃຫ້ "ຮັບເອົາພຣະວິນຍານ," ລາວອາດຈະຫາຍໃຈອອກອາກາດຢ່າງຈິງຈັງເພື່ອສະແດງໃຫ້ເຫັນພຣະວິນຍານບໍລິສຸດສະເດັດມາຫາພວກເຂົາ.
- ຄຳເວົ້າທີ່ມີການປຽບທຽບກັບ "ລົມຫາຍໃຈຂອງພຣະເຈົ້າ" ຫລື "ລົມຫາຍໃຈຂອງພຣະເຢໂຫວາ" ມັກຈະໝາຍເຖິງຄວາມຄຽດແຄ້ນຂອງພຣະເຈົ້າທີ່ຖືກຖອກເທລົງໃສ່ປະເທດທີ່ກະບົດ. ມັນສື່ສານອຳນາດຂອງລາວ.

### ຄຳແນະນຳໃນການແປ

- ຄຳເວົ້າທີ່ວ່າ "ລົມຫາຍໃຈສຸດທ້າຍຂອງລາວ" ແມ່ນວິທີການປຽບທຽບຄຳເວົ້າທີ່ວ່າ "ລາວຕາຍ." ມັນຍັງສາມາດແປ ເປັນ "ລາວໄດ້ລົມຫາຍໃຈສຸດທ້າຍ" ຫລື "ລາວຢຸດຫາຍໃຈແລະຕາຍ" ຫລື "ລາວຫາຍໃຈຢູ່ໃນອາກາດຄັ້ງສຸດທ້າຍ."
- ການພັນລະນາພຣະຄຳພີເປັນ "ລົມຫາຍໃຈຈາກພຣະເຈົ້າ" ໝາຍຄວາມວ່າພຣະເຈົ້າໄດ້ກ່າວ ຫລື ດົນໃຈຖ້ອຍຄຳຂອງພຣະຄຳພີ ເຊິ່ງຜູ້ຂຽນແມ່ນມະນຸດຂຽນ. ມັນອາດຈະເປັນການດີທີ່ສຸດ, ຖ້າເປັນໄປໄດ້, ໃຫ້ແປ "ຈາກທີ່ພຣະເຈົ້າປະທານໃຫ້ທີ່ໄດ້ຈາກພຣະເຈົ້າ" ບາງຄັ້ງເພາະມັນຍາກທີ່ຈະສື່ສານຄວາມໝາຍທີ່ແນ່ນອນຂອງສິ່ງນີ້.
- ຖ້າການແປພາສາ "ລົມຫາຍໃຈຈາກພຣະເຈົ້າ" ເປັນທີ່ຍອມຮັບບໍ່ໄດ້, ວິທີອື່ນໃນການແປພາສານີ້ອາດປະກອບມີ, "ໄດ້ຮັບການດົນໃຈຈາກພຣະເຈົ້າ" ຫລື "ຂຽນໂດຍພຣະເຈົ້າ" ຫລື "ເວົ້າໂດຍພຣະເຈົ້າ." ຍັງສາມາດເວົ້າໄດ້ວ່າ "ຖ້ອຍຄຳທີ່ອອກມາຈ່ຈາກພຣະ ເຈົ້າ ແມ່ນລົມຫາຍໃຈ"ຈາກພຣະຄຳພີ.
- ຄຳເວົ້າທີ່ວ່າ "ເອົາລົມຫາຍໃຈເຂົ້າ" ຫລື "ຫັນໃຈຊີວິດເຂົ້າໄປໃນ" ຫລື "ໃຫ້ລົມຫາຍໃຈ" ສາມາດແປເປັນ "ສາເຫດໃຫ້ຫາຍໃຈ" ຫລື"ເຮັດໃຫ້ມີຊີວິດອີກຄັ້ງ" ຫລື "ເຮັດໃຫ້ພວກເຂົາມີຊີວິດແລະຫາຍໃຈ" ຫລື "ໃຫ້ຊີວິດ. "
- ຖ້າເປັນໄປໄດ້, ມັນດີທີ່ສຸດທີ່ຈະແປ "ລົມຫາຍໃຈຂອງ ພຣະເຈົ້າ" ດ້ວຍຄຳທີ່ຮູ້ໜັງສືທີ່ຖືກໃຊ້ສຳລັບ "ລົມຫາຍໃຈ" ໃນພາສາ. ຖ້າຂາດພຣະເຈົ້າບໍ່ສາມາດເວົ້າໄດ້ວ່າມີລົມຫາຍໃຈ, ນີ້ອາດຈະຖືກແປວ່າ "ພະລັງຂອງພຣະເຈົ້າ" ຫລື "ຄຳເວົ້າຂອງພຣະເຈົ້າ."
- ຄຳເວົ້າທີ່ວ່າ "ຈັບລົມຫາຍໃຈຂອງຂ້ອຍ" ຫລື "ຂ້ອຍຫັນໃຈໃຫ້ຂ້ອຍ" ສາມາດແປວ່າ "ຜ່ອນຄາຍເພື່ອຫາຍໃຈຊ້າໆງ່າຍ" ຫລື "ຢຸດແລ່ນເພື່ອຫາຍໃຈປົກກະຕິ."
- ຄຳເວົ້າທີ່ວ່າ "ເປັນພຽງລົມຫາຍໃຈ" ໝາຍຄວາມວ່າ "ໃຊ້ເວລາສັ້ນໆ."
- ຄ້າຍຄືກັນຄຳເວົ້າທີ່ວ່າ "ມະນຸດແມ່ນລົມຫາຍໃຈດຽວ" ໝາຍ ຄວາມວ່າ "ຄົນເຮົາມີຊີວິດຢູ່ສັ້ນໆ" ຫລື "ຊີວິດຂອງມະນຸດແມ່ນສັ້ນຫລາຍ, ຄືລົມຫາຍໃຈດຽວ" ຫລື "ທຽບກັບພຣະເຈົ້າ, ຊີວິດຂອງຄົນເຮົາເບິ່ງຄືວ່າສັ້ນ ເວລາທີ່ມັນຕ້ອງໃຊ້ເວລາໃນການຫາຍໃຈໃນລົມຫາຍໃຈຢ່າງດຽວ. "

## ຫິມະ

### ນິຍາມ

ຄຳວ່າ "ຫິມະ" ໝາຍເຖິງເກັດສີຂາວຂອງນ້ຳກ້ອນທີ່ຕົກມາຈາກກ້ອນເມກໃນທີ່ຊຶ່ງອຸນຫະພູມຂອງອາກາດໜາວ.

- ຫິມະຕົກໃນທີ່ຊຶ່ງມີລະດັບຄວາມສູງໃນອິດສະຣາເອນ ແຕ່ກ່ໍອາດຈະບໍ່ຢູ່ເທິງດິນບານກ່ອນຈະລະລາຍ ເທິງຍອດພູເຂົາຕ່າງໆ. ມີແນວໂນ້ມທີ່ຈະມີຫິມະຢູ່ໄດ້ນານກວ່າ. ມີຕົວຢ່າງໜຶ່ງທີ່ພຣະຄຳພີໄດ້ກ່າວເຖິງຫິມະເທິງພູເຂົາເລບານອນ.
- ບາງສິ່ງທີ່ມີສີຂາວຈະຖືກປຽບເຖິງສີຂອງຫິມະ ເຊັ່ນດຽວກັບເມື່ອເສື້ອຜ້າຫລືຜົມຂອງພຣະເຢຊູຖືກອະທິບາຍວ່າເປັນ "ສີຂາວເໝືອນຫິມະ."
- ຄວາມຂາວຂອງຫິມະໃຊ້ເປັນສັນຍາລັກຂອງຄວາມບໍລິສຸດແລະຄວາມສະອາດ. ຕົວຢ່າງເຊັ່ນການບັນຍາຍເຖິງ "ຄວາມບາບຂອງເຮົາຈະຂາວດັ່ງຫິມະ" ໝາຍເຖິງພຣະເຈົ້າຊົງຊຳລະຄົນຂອງພຣະອົງຈາກຄວາມບາບຂອງພວກເຂົາຢ່າງສິ້ນເຊີງແລ້ວ.
- ໃນບາງພາສາອາດອ້າງອີງເຖິງຫິມະ ເປັນ "ຝົ້ນທີ່ເປັນເກັດນ້ຳກ້ອນ" ຫລື "ເກັດຂອງນ້ຳກ້ອນ" ຫລື "ເກັດນ້ຳກ້ອນ."


generated on Thu Jul 10 08:45:04 2025

- "ນ້ຳຫົມະ" ອ້າງເຖິງນ້ຳທີ່ໄດ້ມາຈາກການລະລາຍຂອງຫິມະ.

## ຫີບ, ເຮືອ, ນາວາ

### ນິຍາມ

ຄຳວ່າ, " ຫີບ " ຕາມຕົວອັກສອນແລ້ວໝາຍເຖິງກ່ອງໄມ້ຮູບສີ່ຫລ່ຽມຜືນຜ້າ ເຮັດຂຶ້ນມາເພື່ອໃສ່ຂອງຫລືປົກປ້ອງບາງຢ່າງ. ຫີບອາດຈະມີຂະໜາດໃຫຍ່ຫລືນ້ອຍຂຶ້ນຢູ່ກັບວ່າຜູ້ທີ່ຈະໃຊ້ເພື່ອໃສ່ຫຍັງ.

- ໃນພຣະຄັມພີພາສາອັງກິດ, ຄຳວ່າ" ຫີບ"
  ຖືກໃຊ້ໃນຄັ້ງແລກເມື່ອເວົ້າເຖິງເຮືອໄມ້ສີ່ຫລ່ຽມທີ່ມີຂະໜາດທີ່ໂນອາໄດ້ສ້າງຂຶ້ນມາເພື່ອຈະໜີຈາກນ້ຳຖ້ວມຄັ້ງໃຫຍ່, ເຮືອນັ້ນມີພຽງ, ມີຫລັງຄາ, ແລະຝາ.
- ມີວິທີອື່ນໆ ທີ່ຈະແປຄຳນີ້ອາດລວມໄປເຖິງຄຳວ່າ " ເຮືອລຳໃຫຍ່ຫລາຍ "ຫລື "ເຮືອບັນທຸກ" ຫລື"ເຮືອສິນຄ້າ "ຫລື "ເຮືອຊິ່ງຮ່າງຂະໜາດໃຫຍ່."
- ຄວາມເວົ້າໃນພາສາເຮັບເຣີທີ່ໃຊ້ເອີ້ນເຮືອຂະໜາດໃຫຍ່ນີ້ເປັນຄຳດຽວກັນທີ່ໃຊ້ເອີ້ນກະຕ່າຫລືກ່ອງທີ່ໃສ່ເດັກນ້ອຍຊື່ໂມເຊ ເມື່ອມານດາຂອງລາວເອົາໄປປ່ອຍໃນແມ່ນ້ຳນິນເພື່ອເຊື່ອງລາວໄວ້ ໂດຍປົກກະຕິແລ້ວຈະແປວ່າ " ກະຕ່າ. "
- ສ່ວນຄຳວ່າ " ຫີບພັນທະສັນຍາ " ໃນພາສາເຮັບເຣີຈະໃຊ້ອີກຄຳໜຶ່ງສຳລັບຄຳວ່າ " ຫີບ " ຄຳນີ້ອາດຈະແປໄດ້ວ່າ " ກ່ອງ " ຫລື " ຫີບ " ຫລື " ສິ່ງຂອງບັນຈຸຂອງຕ່າງໆ."
- ເມື່ອເລືອກຄຳແປຂອງຄຳວ່າ "ຫີບ, " ເປັນສິ່ງສຳຄັນທີ່ຕ້ອງພິຈາລະນາເຖິງ ແຕ່ວ່າກໍລະນີມີຂະໜາດເທົ່າໃດແລະໃຊ້ເພື່ອໃສ່ຫຍັງ.

## ຫີບພັນທະສັນຍາ, ຫີບແຫ່ງພັນທະສັນຍາບັນຊາ, ຫີບຂອງພຣະຢາເວ

### ນິຍາມ

ຄຳເຫລົ່ານີ້ເວົ້າເຖິງຫີບໄມ້ພິເສດຂະໜາດໃຫຍ່ ຫຸ້ມຫໍ່ດ້ວຍທອງຄຳ ຊຶ່ງບັນຈຸແຜ່ນສິລາສອງແຜ່ນທີ່ຈາລຶກພຣະບັນຍັດສິບປະການໄວ້ ໄມ້ເທົ້າຂອງອາໂລນແລະໂຖໃສ່ມານາ.

- ຄຳວ່າ " ຫີບ " ໃນທີ່ນີ້ອາດແປໄດ້ອີກວ່າ "ກ່ອງ " ຫລື "ຫີບຂະໜາດໃຫຍ່ " ຫລື " ສິ່ງທີ່ໃສ່ຂອງເກັບໄວ້. "
- ວັດຖຸຕ່າງໆ ໃນຫີບຂະໜາດໃຫຍ່ນີ້ທຳໃຫ້ຄົນອິສະຣາເອນ ລະນຶກເຖິງພັນທະສັນຍາຂອງພຣະເຈົ້າທີ່ໄດ້ສັນຍາໄວ້ກັບພວກເຂົາ.
- ຫີບພັນທະສັນຍານີ້ວາງໄວ້ໃນ " ສະຖານທີ່ສັກສິດ. "
- ການຊົງສະຖິດຂອງພຣະເຈົ້າຢູ່ເໜືອຫີບພັນທະສັນຍາ, ໃນສະຖານທີ່ບໍຣິສຸດທີ່ສຸດ,ຫໍເຕັ້ນທີ່ສັກສິດ ເປັນທີ່ຊຶ່ງພຣະເຈົ້າຊົງສັ່ງກັບໂມເຊຜູ້ເປັນນຳຂອງປະຊາຊົນອິສະຣາເອນ.
- ໃນສະໄໝທີ່ພັນທະສັນຍາຕັ້ງຢູ່ຍ່ອນບໍຣິສຸດທີ່ສຸດຂອງພຣະວິຫານ, ມະຫາປະໂລຫິດຈະເປັນພຽງຜູ້ດຽວທີ່ສາມາດເຂົ້າເຖິງຫີບນັ້ນໄດ້ ພຽງປີລະໜຶ່ງຄັ້ງ ໃນວັນແຫ່ງການໄຖ່ບາບ.
- ພຣະຄັມພີພາສາອັງກິດຫລາຍສະບັບແປຄຳວ່າ " ພັນທະສັນຍາບັນຊາ " ຕົ້ງຕາມຕົວອັກຄຳວ່າ " ສັກຂີພະຍານ " ຊຶ່ງໝາຍເຖິງຄວາມຈິງທີ່ວ່າພຣະບັນຍັດສິບປະການເປັນສັກຂີພະຍານຫລືເປັນພະຍານໃຫ້ແກ່ພັນທະສັນຍາຂອງພຣະເຈົ້າ ກັບປະຊາຊົນຂອງພຣະອົງ. ແລະຍັງແປໄດ້ອີກວ່າ " ພຣະບັນຍັດພັນທະສັນຍາ. "

## ຫົ່ງຫວງ, ຄວາມຫົ່ງຫວງ

### ນິຍາມ

ຄຳວ່າ "ຫົ່ງຫວງ" ແລະ "ຄວາມຫົ່ງຫວງ" ເວົ້າເຖິງຄວາມປາຖະໜາອັນແຮງກ້າທີ່ຈະປົກປ້ອງຄວາມບໍຣິສຸດຂອງຄວາມສຳພັນ. ແລະຍັງສາມາດເວົ້າເຖິງຄວາມປາຖະໜາອັນແຮງກ້າທີ່ຈະຮັກສາຄວາມເປັນເຈົ້າຂອງບາງສິ່ງ ຫຼືບາງຄົນ.

- ຄຳເຫຼົ່ານີ້ມັກຈະໃຊ້ເພື່ອອະທິບາຍຄວາມຮູ້ສຶກຢາກຮ້າຍຂອງບຸກຄົນທີ່ມີຕໍ່ຄູ່ສົມຣົດທີ່ບໍ່ສັດຊື່ໃນການແຕ່ງງານຂອງພວກເຂົາ.
- ເມື່ອໃຊ້ໃນພຣະຄຳພີ,
  ຄຳເຫຼົ່ານີ້ມັກຈະໝາຍເຖິງຄວາມປາຖະໜາອັນແຮງກ້າຂອງພຣະເຈົ້າທີ່ມີໃຫ້ປະຊາຊົນຂອງພຣະອົງຮັກສາຄວາມບໍຣິສຸດ ແລະ ບໍ່ມີມົນທິນໂດຍຄວາມບາບ
- ພຣະເຈົ້າຍັງຊົງ "ຫົ່ງຫວງ" ສຳຫຼັບພຣະນາມຂອງພຣະອົງ,
  ເພື່ອໃຫ້ພຣະນາມນັ້ນໄດ້ຮັບການປະຕິບັດດ້ວຍກຽດແລະຄວາມໂຄລົບນັບຖື.
- ຄວາມໝາຍອີກຢ່າງໜຶ່ງຂອງຄຳວ່າຫົ່ງຫວງ ແມ່ນກ່ຽວກັບຄວາມຮູ້ສຶກຢາກຮ້າຍ ທີ່ເຫັນຄົນອື່ນໄດ້ຮັບຜົນສຳເລັດຫຼືມີຊີສຽງດີກວ່າ ສິ່ງນີ້ມີຄວາມໝາຍໃກ້ຄຽງກັບຄຳວ່າ “ອິດສາ.”


generated on Thu Jul 10 08:45:04 2025

### ຄຳແນະນຳໃນການແປ

- ວິທີອື່ນອີກທີ່ຈະແປຄຳວ່າ “ຫົ່ງຫວ່ງ“ ສາມາດເວົ້າໄດ້ວ່າ,”ຄວາມປາຖະໜາອັນແຮງກ້າທີ່ຈະປ້ອງກັນ“ ຫຼື “ຄວາມປາຖະໜາທີ່ຈະເປັນຜູ້ຄອບຄອງ.”
- ຄຳວ່າ “ຄວາມຫົ່ງຫວ່ງ“ ສາມາດແປໄດ້ວ່າ “ຄວາມຮູ້ສຶກອັນແຮງກ້າທີ່ຈະປົກປ້ອງ“ ຫຼື “ຄວາມຮູ້ສຶກໃນການເປັນຜູ້ຄອບຄອງ“
- ເມື່ອເວົ້າເຖິງພຣະເຈົ້າ,ໃຫ້ໝັ້ນໃຈວ່າຄຳແປຂອງຄຳເຫຼົ່ານີ້ບໍ່ໄດ້ມີຄວາມໝາຍໃນທາງລົບຂອງຄວາມຮູ້ສຶກເຈັບແຄ້ນໃຈກັບຄົນອື່ນ.
- ໃນສະພາບການຂອງຄົນທີ່ມີຄວາມຮູ້ສຶກຜິດໃນຄວາມຢາກຮ້າຍຕໍ່ຄົນອື່ນທີ່ໄດ້ຮັບຄວາມສຳເລັດຫຼາຍກວ່າ,ຄຳວ່າ “ຢ້ານລຶນ“ ຫຼື “ອິດສາ“ ສາມາດໃຊ້ໄດ້.ແຕ່ຄຳເຫຼົ່ານີ້ບໍ່ຄວນໃຊ້ກັບພຣະເຈົ້າ.

## ຫົວກະໂຫລກ

### ນິຍາມ

ຄຳວ່າ "ຫົວກະໂຫລກ" ອ້າງເຖິງກ່ຽວກັບກະດູກ ເປັນໂຄງກະດູກຂອງຫົວຂອງບຸກຄົນຫລືສັດ

- ບາງເທື່ອຄຳວ່າ"ຫົວກະໂຫລກ" ໝາຍເຖິງ "ຫົວ" ເຊັ່ນຄຳວ່າ, "ແຖຫົວຂອງທ່ານ."
- ຄຳວ່າ, "ສະຖານທີ່ຂອງກະໂຫລກ" ເປັນອີກຊື່ໜຶ່ງຂອງໂກລະໂຄທາທີ່ຊຶ່ງພຣະເຢຊູຊົງຖືກຄຶງ.
- ຄຳນີ້ແປໄດ້ອີກວ່າ, "ຫົວ" ຫລື "ກະດູກຫົວ"

## ຫົວຄົນ, ສີສະ, ຫົວ

### ນິຍາມ

ໃນພຣະຄຳພີ, ຄຳວ່າ "ຫົວ" ຖືກໃຊ້ໃນຄວາມໝາຍເຊີງປຽບທຽບຫລາຍຄວາມໝາຍ.

- ຫລາຍເທື່ອຄຳນີ້ຖືກໃຊ້ເພື່ອອ້າງເຖິງການມີອຳນາດເໜືອຜູ້ຄົນ, ເຊັ່ນໃນ, "ທ່ານໄດ້ເຮັດໃຫ້ຂ້າພະເຈົ້າເປັນຜູ້ນຳເໜືອປະຊາຊາດ." ນີ້ສາມາດແປໄດ້ວ່າ, "ທ່ານໄດ້ເຮັດໃຫ້ຂ້າພະເຈົ້າເປັນຜູ້ປົກຄອງ..." ຫລື "ທ່ານໄດ້ໃຫ້ຂ້າພະເຈົ້າມີອຳນາດເໜືອ..."
- ພຣະເຢຊູຖືກເອີ້ນວ່າ "ຫົວຂອງຄຣິສຕະຈັກ." ເຊັ່ນດຽວກັບຫົວຂອງຄົນໜຶ່ງທີ່ນຳທາງແລະຊີ້ນຳອະໄວຍະວະສ່ວນອື່ນໆ ຂອງຮ່າງກາຍ, ພຣະເຢຊູກໍຊົງນຳທາງແລະຊີ້ນຳສະມາຊິກຂອງ "ພະກາຍ," ຂອງພຣະອົງ ນັ້ນຄືຄຣິສຕະຈັກ.
- ພັນທະສັນຍາໃໝ່ສອນວ່າຜົວເປັນ "ຫົວ" ຫລືສິດທິອຳນາດຂອງພັນລະຍາຂອງເຂົາ. ເຂົາໄດ້ຮັບໜ້າທີ່ໃນການນຳແລະຊີ້ນຳພັນລະຍາແລະຄອບຄົວ.
- ຄຳກ່າວວ່າ, "ມືດແຖຈະບໍ່ມີມືໄດ້ແຕະຕ້ອງຫົວຂອງເຂົາ" ໝາຍເຖິງ "ເຂົາຈະບໍ່ມີມືຕັດຫລືແຖຜົມຂອງເຂົາ."
- ຄຳວ່າ "ຫົວ"ສາມາດໝາຍເຖິງຈຸດເລີ່ມຕົ້ນຫລືແຫລ່ງກຳເນີດຂອງບາງສິ່ງເຊັ່ນໃນ "ຫົວຖະໜົນ."
- ຄຳກ່າວ "ຫົວຂອງເມັດເຂົ້າ" ອ້າງເຖິງສ່ວນຍອດຂອງເຂົ້າຝ່າງຫລືເຂົ້າບາເລທີ່ບັນຈຸເມັດພືດ.
- ຄຳກ່າວໃນເຊີງປຽບທຽບອີກຢ່າງໜຶ່ງຄືເມື່ອໃຊ້ໃນການສະແດງເຖິງຄົນທັ້ງຕົວ ເຊັ່ນ, "ຄົນຫົວສີເທົ່າຄົນນີ້" ອ້າງເຖິງຄົນສູງອາຍຸຫລື "ຫົວຂອງໂຢເຊບ" ອ້າງເຖິງໂຢເຊບ.
- ຄຳກ່າວ "ໃຫ້ເລືອດຂອງພວກເຂົາຢູ່ເທິງຫົວຂອງເຂົາເອງ" ໝາຍຄວາມວ່າຄົນນັ້ນຕ້ອງຮັບຜິດຊອບການຕາຍຂອງຄົນທັ້ງຫລາຍແລະຈະໄດ້ຮັບການລົງໂທດຈາກການກະທຳນັ້ນ.

### ຄຳແນະນຳໃນການແປ

- ຂຶ້ນຢູ່ກັບບໍລິບົດ, ຄຳວ່າ "ຫົວ" ສາມາດແປໄດ້ວ່າ, "ສິດທິອຳນາດ" ຫລື "ຄົນທີ່ນຳແລະສັ່ງການ" ຫລື "ຄົນທີ່ຮັບຜິດຊອບ."
- ຄຳກ່າວ "ຫົວຂອງ" ສາມາດອ້າງເຖິງບຸກຄົນທັ້ງຕົວ ດັ່ງນັ້ນຄຳກ່າວນີ້ສາມາດແປໄດ້ໂດຍການໃຊ້ຊື່ຂອງຄົນນັ້ນ ຍົກຕົວຢ່າງເຊັ່ນ, "ຫົວຂອງໂຢເຊບ" ອາດຈະແປໄດ້ວ່າ "ໂຢເຊບ."
- ຄຳກ່າວ "ຈະຢູ່ເທິງຫົວຂອງເຂົາເອງ" ສາມາດແປວ່າ "ຈະຢູ່ເທິງເຂົາ" ຫລື "ເຂົາຈະຖືກລົງໂທດ" ຫລື "ເຂົາຈະຕ້ອງຮັບຜິດຊອບສ່ຳລັບ" ຫລື "ເຂົາຈະຖືກນັບວ່າມີຄວາມຜິດ"
- ຂຶ້ນຢູ່ກັບບໍລິບົດ, ວິທີອື່ນທີ່ຈະແປຄຳນີ້ສາມາດລວມເຖິງ, "ເລີ່ມຕົ້ນ" ຫລື "ແຫລ່ງ" ຫລື "ຜູ້ປົກຄອງ" ຫລື "ຜູ້ນຳ" ຫລື "ຍອດ."


generated on Thu Jul 10 08:45:04 2025

## ຫົວໃຈ

### ນິຍາມ

ໃນພຣະຄໍາພີ, ຄໍາວ່າ "ຫົວໃຈ" ມັກຈະຖືກໃຊ້ໃນເຊີງປຽບທຽບຊຶ່ງອ້າງເຖິງຄວາມຄິດ ອາລົມ, ຄວາມປາດຖະໜາ, ຫລື ຄວາມຕັ້ງໃຈຂອງບຸກຄົນ.

- ການມີ "ຫົວໃຈແຂງກະດ້າງ" ເປັນຄໍາກ່າວຫົວໄປທີ່ໝາຍເຖິງບຸກຄົນທີ່ປະຕິເສດທີ່ຈະເຊື່ອຟັງພຣະເຈົ້າດ້ວຍຄວາມດື້ດ້ານ.
- ຄໍາກ່າວ "ດ້ວຍສຸດໃຈຂອງຂ້າພະເຈົ້າ" ຫລື "ດ້ວຍຫົວໃຈທັ້ງໝົດຂອງຂ້າພະເຈົ້າ" ໝາຍເຖິງການເຮັດບາງຢ່າງໂດຍເຕັມກໍາລັງ, ໂດຍການທຸ້ມເທແລະຕັ້ງໃຈຢ່າງເຕັມທີ .
- ຄໍາກ່າວ, "ເອົາມາໃສ່ໃຈ" ໝາຍເຖິງການປະຕິບັດຕໍ່ບາງຢ່າງດ້ວຍຄວາມຈິງຈັງແລະນໍາມາໃຊ້ໃນຊີວິດຂອງຕົນເອງ.
- ຄໍາວ່າ "ໃຈແຕກສະລາຍ" ອະທິບາຍເຖິງຄົນທີ່ໂສກເສົ້າຫລາຍ. ພວກເຂົາຖືກທໍາຮ້າຍຢ່າງໜັກດ້ານອາລົມຄວາມຮູ້ສຶກ.

### ຄໍາແນະນໍາໃນການແປ

- ບາງພາສາໃຊ້ສ່ວນອື່ນຂອງຮ່າງກາຍ ເຊັ່ນ "ກະເພາະ" ຫລື "ຕັບ" ເພື່ອອ້າງເຖິງຄວາມຄິດເຫລົ່ານີ້.
- ພາສາອື່ນໆອາດຈະໃຊ້ຄໍາດຽວໃນການອະທິບາຍແນວຄິດບາງຢ່າງເຫລົ່ານີ້ແລະໃຊ້ອີກຄໍາໜຶ່ງໃນການອະທິບາຍແນວຄິດອື່ນໆ .
- ຖ້າ "ຫົວໃຈ" ຫລືຮ່າງກາຍສ່ວນອື່ນໆ ບໍ່ໄດ້ມີຄວາມໝາຍນີ້ ບາງພາສາອາດຈໍາເປັນຕ້ອງແປກົງໆ ບໍ່ຕ້ອງປຽບທຽບ ແລະໃຊ້ຄໍາວ່າ "ຄວາມຄິດ" ຫລື "ອາລົມຄວາມຮູ້ສຶກ" ຫລື "ຄວາມປາດຖະໜາ."
- ຂຶ້ນຢູ່ກັບສະພາບການ, "ດ້ວຍສຸດໃຈຂອງຂ້າພະເຈົ້າ" ຫລື "ດ້ວຍຫົວໃຈທັ້ງໝົດຂອງຂ້າພະເຈົ້າ" ສາມາດແປໄດ້ວ່າ, "ດ້ວຍພະລັງທັ້ງໝົດຂອງຂ້າພະເຈົ້າ" ຫລື "ດ້ວຍການທຸ້ມເທຢ່າງເຕັມກໍາລັງ" ຫລື "ຢ່າງເຕັມທີ."
- ວະລີ "ເອົາມາໃສ່ໃຈ" ອາດຈະແປໄດ້ວ່າ "ປະຕິບັດຕໍ່ສິ່ງນັ້ນດ້ວຍຄວາມຈິງຈັງ" ຫລື "ຄິດຢ່າງຮອບຄອບກ່ຽວກັບສິ່ງນັ້ນ."
- ຄໍາກ່າວ "ຫົວໃຈແຂງກະດ້າງ" ອາດສາມາດແປໄດ້ວ່າ, "ກະບົດດ້ວຍຄວາມດື້ດຶງ" ຫລື "ປະຕິເສດທີ່ຈະເຊື່ອຟັງ" ຫລື "ບໍ່ເຊື່ອຟັງພຣະເຈົ້າຕໍ່ໄປເລື້ອຍໆ."
- ວິທີທີ່ຈະແປ "ໃຈແຕກສະລາຍ" ສາມາດລວມເຖິງ, "ເສຍໃຈຫລາຍ" ຫລື "ຮູ້ສຶກເຈັບປວດຢ່າງແຮງ."

## ຫົວໜ້າ

### ນິຍາມ

ຄໍາວ່າ "ຫົວໜ້າ" ກ່າວເຖິງຜູ້ນໍາທີ່ມີອໍານາດຫລືສໍາຄັນທີ່ສຸດຂອງກຸ່ມໃດກຸ່ມໜຶ່ງ.

- ຕົວຢ່າງຄໍານີ້ລວມເຖິງຄໍາວ່າ "ຫົວໜ້ານັກດົນຕີ, "ຫົວ

ໜ້າປະໂຣຫິດ," ແລະ "ຫົວໜ້າຄົນເກັບພາສີ." ແລະ "ຫົວໜ້າຜູ້ປົກຄອງ."

- ຄໍານີ້ໃຊ້ສໍາລັບຫົວໜ້າຄອບຄົວໄດ້ດວ້ຍ, ຢ່າງເຊັ່ນ ໃນປະຖົມມະການບົດທີ 36 ທີ່ບອກວ່າພວກຜູ້ຊາຍທີ່ມີຊື່ເອີ້ນເປັນ "ພວກຫົວໜ້າ" ຂອງເຜົ່າຄອບຄົວ. ໃນຖ້ອຍຄໍານີ້, ຄໍາວ່າ "ຫົວໜ້າ" ສາມາດແປວ່າ "ຜູ້ນໍາ" ຫຼື " ຫົວໜ້າຄອບຄົວ."
- ເມື່ອໃຊ້ອະທິບາຍຄໍານາມ, ຄໍານີ້ແປໄດ້ວ່າ "ການນໍາ" ຫຼື "ການປົກຄອງ," ຢ່າງເຊັ່ນ "ການນໍາຄະນະນັກດົນຕີ" ຫລື "ພວກປະໂຣຫິດທີ່ປົກຄອງ."

## ຫຼົງຕົວ

### ນິຍາມ

ຄໍາວ່າ "ຫຼົງຕົວ" ເປັນຄໍາກ່າວເຊີງປຽບເປັຍທີ່ອ້າງເຖິງຄວາມຍິ່ງຫລືຈອງຫອງ (ເບິ່ງ: [[c://*/ta/man/translate/figs-idiom]])

- ບຸກຄົນທີ່ຫຼົງຕົວມີທັສນະຄະຕິຂອງຄວາມຮູ້ສຶກທີ່ເໜືອກວ່າຄົນອື່ນໆ
- ໂປໂລໄດ້ສອນວ່າການຮູ້ຂໍ້ມູນຫລາຍໆຫລືການມີປະສົບການທາງສາດສະໜາສາມາດນໍາໄປສູ່ການ "ຫຼົງຕົວ" ຫລືຄວາມຍິ່ງໄດ້
- ພາສາອື່ນອາດມີສໍານວນທີ່ຄ້າຍກັນຫລືຕ່າງກັນທີ່ສະແດງເຖິງຄວາມຫມາຍຂອງຄໍານີ້ ເຊັ່ນ "ມີຫົວສູງ"
- ນີ້ສາມາດແປໄດ້ວ່າ "ຍິ່ງຫລາຍ" ຫລື "ດູຖູກຜູ້ອື່ນ" ຫລື "ໂອ້ຫ້ງ" ຫລື "ຄິດວ່າຕົວເອງດີກວ່າຄົນອື່ນໆ"

## ຫຼົງເຈີນ, ພັດໄປ, ນຳຫລົງໄປ, ຫັນເຫ

### ນິຍາມ

ຄຳວ່າ " ຫັນເຫ " ແລະຄຳວ່າ " ພັດໄປ " ໝາຍເຖິງການບໍ່ເຊື່ອຟັງພຣະປະສົງຂອງພຣະເຈົ້າ ຄົນທີ " ນຳຫລົງໄປ " ໄດ້ປ່ອຍໃຫ້ຄົນອື່ນຫລືສະຖານະການອື່ນມາມີອິດທິພົນເໜືອພວກເຂົາທຳໃຫ້ບໍ່ເຊື່ອຟັງພຣະເຈົ້າ.

- ຄຳວ່າ " ຫລົງເຈີນ " ທຳໃຫ້ເຫັນພາບການຖິ້ມເສັ້ນທາງຫີລາບລຶ່ນຫລືສະຖານທີ່ປອດພັຍ ແລ້ວອອກຍັ້ງເສັ້ນທາງທີ່ຜິດແລະອັນຕະລາຍ.
- ແກະທີ່ອອກໄປຈາກຫົ່ງຫຼ້າທີ່ຂຽວສົດຂອງຜູ້ລ້ຽງ ໄດ້ " ຫລົງພັດຈາກຝູງໄປ " ພຣະເຈົ້າຊົງປຽບທຽບຄົນບາບເປັນເໝືອນແກະທີ່ໄດ້ອອກຈາກພຣະອົງແລະ " ພັດຫລົງໄປ. "

### ຂໍ້ແນະນຳໃນການແປ

- ຄຳວ່າ " ຫລົງເຈີນ " ອາດຈະແປໄດ້ອີກວ່າ " ອອກໄປຈາກພຣະເຈົ້າ "ຫລື " ເດີນຜິດທາງຈາກພຣະປະສົງຂອງພຣະເຈົ້າ " ຫລື " ເຊົາເຊື່ອຟັງ ພຣະເຈົ້າ " ຫລື " ຢູ່ໃນເສັ້ນທາງທີ່ອອກໄປຈາກພຣະເຈົ້າ "
- ການ " ເຮັດໃຫ້ບາງຄົນຫລົງໄປ " ອາດຈະແປໄດ້ອີກວ່າ " ເປັນເຫດໃຫ້ບາງຄົນບໍ່ເຊື່ອຟັງພຣະເຈົ້າ " ຫລື "ມີອິດທິພົນເຮັດໃຫ້ບາງຄົນເຊົາເຊື່ອຟັງພຣະເຈົ້າ " ຫລື " ເປັນເຫດໃຫ້ບາງຄົນຕິດຕາມເຂົາໄປໃນເສັ້ນທາງທີ່ຜິດ. "

## ຫໍຄອຍສັ່ງເກດການ, ຫໍຄອຍ

### ນິຍາມ

ຄຳວ່າ "ຫໍຄອຍສັ່ງເກດການ" ໝາຍເຖິງສິ່ງກໍ່ສ້າງທີ່ສູງ ສ້າງຂຶ້ນເພື່ອເປັນສະຖານທີ່ທະຫານຍາມສາມາດຫຼຽວເຫັນອັນຕະລາຍໄດ້ແຕ່ໃກ້ໆ ຫໍຄອຍເຫຼົ່ານີ້ເຮັດດ້ວຍກ້ອນຫີນ.

- ພວກເຈົ້າຂອງທີ່ດິນບາງຄົນກໍ່ສ້າງຫໍຄອຍສັ່ງເກດການ ຈາກທີ່ພວກເຂົາສາມາດປ້ອງກັນຜົນລະປູກໄດ້ແລະປົກປ້ອງສິ່ງຂອງຈາກການຂະໂມຍ.
- ຫໍຄອຍເຮັດມີຫ້ອງພັກຂອງຄົນຍາມຫຼືຄອບຄົວອາໃສຢູ່ເພື່ອຈະສາມາດປ້ອງກັນຜົນລະປູກໄດ້ທັ້ງກາງວັນແລະກາງຄືນ.
- ຫໍສັ່ງເກດການເມືອງຕ່າງໆ ຖືກສ້າງຂຶ້ນສູງກ່ວາກຳແພງເມືອງ ເພື່ອຫຼຽວເຫັນວ່າມີສັດຕູໃດໆມາໂຈມຕີເມືອງຫຼືບໍ່.
- ຄຳວ່າ "ຫໍສັ່ງເກດການ" ເປັນສັນຍາລັກຂອງການປ້ອງກັນຈາກສັດຕູໄດ້ດ້ວຍເຊັ່ນກັນ

## ຫໍເຕັນ

### ນິຍາມ

ຫໍເຕັນເປັນໂຄ່ງສ້າງທີ່ເໝືອນເຕັນພິເສດທີ່ຊາວອິດສະຣາເອນໃຊ້ນະມັດສະການພຣະເຈົ້າຕລອດເວລາ40ປີທີ່ພວກເຂົາໄດ້ເດີນທາງໃນທະເລຊາຍ.

- ພຣະເຈົ້າໄດ້ຊົງປະທານລາຍລະອຽດຂັ້ປະຕິບັດຕ່າງໆໃນການສ້າງເຕັນໃຫຍ່ແຫ່ງນີ້, ເຊິ່ງມີສອງຫ້ອງແລະຖືກລ້ອມຮອບດ້ວຍລານຊັ້ນນອກ.
- ແຕ່ລະຄັ້ງທີ່ຊົນຍົດສະລາເອນຍ້າຍໄປຢູ່ບ່ອນອື່ນໃນທະເລຊາຍເພື່ອອາໄສຢູ່, ພວກປະໂລຫິດຈະແຍກຫໍເຕັນແລະພາໄປທີ່ຫໍພັກແຫ່ງຕໍ່ໄປຂອງພວກເຂົາ. ຫຼັງຈາກນັ້ນ, ພວກເຂົາກໍ່ຈະຕັ້ງມັນອີກໃນໃຈກາງຂອງຄ້າຍໃໝ່ຂອງພວກເຂົາ.
- ຫໍເຕັນໄດ້ຮັບການກໍ່ສ້າງດ້ວຍໄມ້ທີ່ຫ້ອຍດ້ວຍຜ້າມ່ານເຮັດມາຈາກຜ້າ, ຂົນແຢ້, ແລະ ໜັງສັດ. ບໍລິເວນລານຮອບຖືກປົດດ້ວຍຜ້າມ່ານຫລາຍກ່ວາ.
- ຫໍເຕັນມີສອງສ່ວນຄື ສ່ວນທີ່ເປັນສະຖານທີ່ບໍຣິສຸດ (ແທ່ນບູຊາເຜົາເຄື່ອງບູຊາຕັ້ງຢູ່) ແລະຫ້ອງບໍຣິສຸດທີ່ສຸດ(ທີ່ເຊິ່ງຫີບພັນທະສັນຍາຕັ້ງຢູ່).
- ລານຂອງຫໍເຕັນມີແທ່ນບູຊາໃຊ້ເຜົາບູຊາສັດຢູ່ແລະອ່າງລ້າງມືພິເສດໃຊ້ຊຳລະໃນພິທີກຳ.
- ຄົນອິດສະຣາເອນໄດ້ຢຸດໃຊ້ຫໍເຕັນເມື່ອພຣະວິຫານຂອງຊາໂລໂມນໃນເຢຣູຊາເລັມສ້າງສຳເລັດ.

### ຄຳແນະນຳໃນການແປ

- ຄຳວ່າຫໍເຕັນມີຄວາມໝາຍວ່າ "ບ່ອນຢູ່ອາໄສ." ອີກວິທີໜຶ່ງທີ່ຈະແປມັນອາດລວມມີ, "ເຕັນທີ່ສັກສິດ" ຫລື "ເຕັນບ່ອນທີ່ພຣະເຈົ້າຢູ່" ຫຼື "ເຕັນຂອງພຣະເຈົ້າ."
- ໃຫ້ແນ່ໃຈວ່າການແປຄຳສັບນີ້ມີຄວາມແຕກຕ່າງຈາກຄຳວ່າ "ພຣະວິຫານ".


generated on Thu Jul 10 08:45:04 2025

## ອວຍພອນ, ໄດ້ຮັບການອວຍພອນ, ພຣະພອນ

### ນິຍາມ

ການ“ ອວຍພອນໃຫ້” ບາງຄົນຫລືບາງສິ່ງບາງຢ່າງໝາຍເຖິງການເຮັດໃຫ້ສິ່ງທີ່ດີແລະເປັນປະໂຫຍດເກີດຂຶ້ນກັບຄົນຫລືສິ່ງທີ່ໄດ້ຮັບພອນ.

- ການອວຍພອນໃຫ້ຜູ້ໃດຜູ້ໜຶ່ງກໍໝາຍເຖິງການສະແດງຄວາມປາຖະໜາຢາກໃຫ້ສິ່ງທີ່ດີແລະມີປະໂຫຍດເກີດຂຶ້ນກັບຄົນນັ້ນ.
- ໃນສະໄໝທີ່ຂຽນພຣະຄຳພີຜູ້ເປັນພໍ່ມັກຈະອອກປາກສຽງເພື່ອອວຍພອນຢ່າງເປັນທາງການໃຫ້ແກ່ລູກຂອງຕົນ.
- ເມື່ອປະຊາຊົນ“ ອວຍພອນໃຫ້” ພຣະເຈົ້າຫລືສະແດງຄວາມປາດຖະໜາທີ່ວ່າພຣະເຈົ້າຈະໄອວຍໃຫ້, ນີ້ໝາຍຄວາມວ່າພວກເຂົາກຳລັງສັນລະເສີນພຣະອົງ.
- ຄຳວ່າ“ ອວຍພອນ” ບາງຄັ້ງໃຊ້ໃນການຮັບປະທານອາຫານກ່ອນທີ່ຈະກິນ, ຫລືເພື່ອເປັນການຂອບໃຈແລະສັນລະເສີນພຣະເຈົ້າສຳລັບອາຫານນັ້ນ.

// ຈາກຄຳເຫັນຂ້າງລຸ່ມນີ: ມັນເປັນສິ່ງສຳຄັນທີ່ຈະບໍ່ກຳນົດ, ສຸມໃສ່, ຫລືຖືກຈຳກັດໂດຍການນຳໃຊ້ຄຳສັບຮາກຂອງຄຳວ່າ "ອວຍພອນໃຫ້" ທີ່ແນະນຳໃຫ້ຕົ້ນຕໍແມ່ນຄວາມອຸດົມສົມບູນຫລືອຸດົມສົມບູນຂອງວັດຖຸຫຼືສຸຂະພາບທາງຮ່າງກາຍ.
ພິຈາລະນາຄຳສອນທີ່ກວ້າງຂວາງໃນພຣະຄຳພີກ່ຽວກັບຄວາມຮັກ, ຄວາມເມດຕາແລະພຣະຄຸນຂອງພຣະເຈົ້າທີ່ບໍ່ພຽງແຕ່ເປັນວັດຖຸບູຮານ, ແຕ່ປະຈຸບັນ. ພິຈາລະນາເບິ່ງແຍງ, ປົກປ້ອງ, ແລະການມີພຣະວິນຍານຂອງພຣະເຈົ້າ. ແລະເພື່ອພວກເຮົາຈະອວຍພອນໃຫ້ພວກເຈົ້າ, ພວກເຮົາສາມາດສະແດງຄວາມຂອບໃຈ, ຄວາມຮູ້ບຸນຄຸນແລະຄວາມເຂົ້າໃຈເມື່ອພວກເຮົາຮຽນຮູ້ແລະເຮັດຕາມ (ເຊື່ອຟັງ)ພຣະອົງ.//

### ຄຳແນະນຳໃນການແປ

- "ອວຍພອນໃຫ້" ຍັງສາມາດຖືກແປເປັນ, "ເພື່ອໃຫ້ຄວາມອຸດົມສົມບູນ" ຫລື "ມີຄວາມກະລຸນາແລະເອື້ອເຟື້ອເພື່ອແຜ່."
- "ພຣະເຈົ້າໄດ້ນຳພອນທີ່ຍິ່ງໃຫຍ່ມາໃຫ້" ສາມາດແປເປັນ ", ພຣະເຈົ້າໄດ້ປະທານສິ່ງດີໆຫລາຍໆຢ່າງໃຫ້" ຫລື "ພຣະເຈົ້າໄດ້ຈັດຫາສິ່ງທີ່ດີໃຫ້" ຫລື "ພຣະເຈົ້າໄດ້ເຮັດໃຫ້ສິ່ງດີໆເກີດຂຶ້ນຫລາຍຢ່າງ".
- "ລາວໄດ້ຮັບພອນ" ສາມາດຖືກແປເປັນ "ລາວຈະໄດ້ຮັບຜົນປະໂຫຍດຢ່າງຫຼວງຫລາຍ" ຫລື "ລາວຈະປະສົບກັບສິ່ງທີ່ດີ" ຫລື "ພຣະເຈົ້າຈະເຮັດໃຫ້ລາວຈະເລີນຮຸ່ງເຮືອງ."
- "ພອນ" ສາມາດແປເປັນ "ມັນດີປະເສີດສຳລັບຜູ້ທີ່ຮັບ."
- ສຳນວນທີ່ຄ້າຍຄື, "ໃຫ້ພຣະເຈົ້າອວຍພອນ" ສາມາດແປເປັນ, "ຂໍໃຫ້ພຣະຜູ້ເປັນເຈົ້າໄດ້ຮັບການຍ້ອງຍໍ" ຫລື "ສັນລະເສີນພຣະຜູ້ເປັນເຈົ້າ" ຫລື "ຂ້ອຍສັນລະເສີນພຣະຜູ້ເປັນເຈົ້າ."
- ໃນແງ່ຂອງການອວຍພອນອາຫານ, ສິ່ງນີ້ສາມາດແປເປັນ, "ຂອບໃຈພຣະເຈົ້າ ສຳລັບອາຫານ" ຫລື "ສັນລະເສີນພຣະເຈົ້າທີ່ໄດ້ໃຫ້ອາຫານແກ່ພວກເຂົາ" ຫລື "ອາຫານທີ່ໄດ້ຮັບການອຸທິດໂດຍການສັນລະເສີນພຣະເຈົ້າ ສຳລັບອາຫານ."

## ອະທຳ, ຄວາມອະທຳ

### ນິຍາມ

ຄຳວ່າ "ອະທຳ" ໝາຍເຖິງການເຮັດບາບແລະຜິດສິນລະທຳ. "ຄວາມບໍ່ຊອບທຳ" ອ້າງເຖິງບາບຫລືສະພາບການມີບາບ.

- ຄຳເຫລົ່ານີ້ໂດຍສະເພາະອ້າງເຖິງການໃຊ້ຊີວິດໃນທາງທີ່ບໍ່ເຊື່ອຟັງຄຳສອນແລະຄຳສັ່ງຂອງພຣະເຈົ້າ.
- ຄົນອະທຳມີຄວາມອະທຳໃນຄວາມຄິດແລະການກະທຳຂອງຕົນ.
- ບາງເທື່ອ "ຜູ້ບໍ່ຊອບທຳ" ໂດຍສະເພາະອ້າງເຖິງຜູ້ທີ່ບໍ່ເຊື່ອໃນພຣະເຢຊູ.

### ຄຳແນະນຳໃນການແປ

- ຄຳນີ້ສາມາດແປໄດ້ງ່າຍໆ ວ່າ "ບໍ່ຊອບທຳ."
- ຂຶ້ນຢູ່ກັບຄວາມໝາຍ ວິທີອື່ນໃນການແປນີ້ສາມາດລວມເຖິງ, "ຊົ່ວຮ້າຍ" ຫລື "ຜິດສິນລະທຳ" ຫລື "ຄົນທີ່ກະບົດຕໍ່ພຣະເຈົ້າ" ຫລື "ມີບາບ."
- ຖ້ອຍຄຳທີ່ວ່າ "ບໍ່ຊອບທຳ" ສາມາດແປວ່າ "ຄົນບໍ່ຊອບທຳ."
- ຄຳວ່າ "ຄວາມບໍ່ຊອບທຳ" ສາມາດແປວ່າ "ບາບ" ຫລື "ຄວາມຄິດແລະການກະທຳຊົ່ວຮ້າຍ" ຫລື "ຄວາມຊົ່ວຮ້າຍ."
- ຖ້າເປັນໄປໄດ້, ສິ່ງດີທີ່ສຸດໃນການແປຄວາມໝາຍນີ້ໃນແບບທີ່ສະແດງເຖິງຄວາມສຳພັນລະຫວ່າງ "ຊອບທຳ, ແລະ ຄວາມຊອບທຳ."


generated on Thu Jul 10 08:45:04 2025

## ອະທິຖານ, ຄຳອະທິຖານ

### ນິຍາມ

ຄຳວ່າ ''ອະທິຖານ'' ແລະ ''ຄຳອະທິຖານ'' ໝາຍເຖິງການສົນທະນາກັບພຣະເຈົ້າ. ຄຳນີ້ຍັງໝາຍເຖິງຄົນທີ່ພະຍາຍາມເວົ້າກັບພະປອມດ້ວຍ.

- ຄົນສາມາດອະທິຖານຢ່າງງຽບໆ, ສົນທະນາກັບພຣະເຈົ້າດ້ວຍຄວາມຄິດຂອງພວກເຂົາ ຫລື ພວກເຂົາສາມາດອະທິຖານ,
  ອອກສຽງສົນທະນາກັບພຣະເຈົ້າດ້ວຍສຽງຂອງພວກເຂົາ. ບາງເທື່ອຄຳອະທິຖານກໍຖືກຂຽນ,
  ລົງໄວ້ເຊັ່ນດຽວກັບດາວິດທີ່ໄດ້ຂຽນຄຳອະທິຖານຂອງລາວໄວ້ໃນພຣະຄຳພີສັນລະເສີນ.
- ຄຳອະທິຖານລວມໄປເຖິງການຂໍພຣະເມດຕາພຣະເຈົ້າ, ຂໍການຊ່ວຍເຫລືອແກ້ບັນຫາ, ຂໍສະຕິປັນຍາໃນການຕັດສິນໃຈ.
- ຫລາຍເທື່ອຄົນມັກຂໍພຣະເຈົ້າໃຫ້ຮັກສາຄົນທີ່ປ່ວຍ ຫລື ຄົນທີ່ຕ້ອງການຄວາມຊ່ວຍເຫລືອໃນເລື່ອງອື່ນໆ.
- ຜູ້ຄົນຍັງຂອບຄຸນພຣະເຈົ້າແລະສັນລະເສີນພຣະເຈົ້າເມື່ອຂະນະພວກເຂົາກຳລັງອະທິຖານທູນຕໍ່ພຣະອົງ.
- ການອະທິຖານລວມເຖິງການສາລະພາບບາບຂອງເຮົາຕໍ່ພຣະເຈົ້າແລະຂໍພຣະອົງອະໄພຍບາບໃຫ້ແກ່ເຮົາ.
- ການສົນທະນາກັບພຣະເຈົ້າບາງເທື່ອເອີ້ນວ່າ ''ໄຕ່ຕອງ''
  ກັບພຣະອົງເໝືອນທີ່ຈິດວິນຍານຂອງເຮົາຕິດຕໍ່ສື່ສານກັບວິນຍານຂອງພຣະອົງ,
  ແບ່ງປັນຄວາມຮູ້ສຶກຂອງເຮົາແລະຊື່ນຊົມຍິນດີຕໍ່ພຣະພັກພຣະອົງ.
- ຄຳນີ້ສາມາດແປໄດ້ວ່າ ''ສົນທະນາກັບພຣະເຈົ້າ'' ຫລື ''ຕິດຕໍ່ສື່ສານກັບພຣະເຈົ້າ''
  ຄຳແປຂອງຄຳນີ້ຄວນລວມໄປເຖິງການອະທິຖານໃນທີ່ງຽບ.

## ອະເວຈິ

### ນິຍາມ

ຄຳວ່າ "ອະເວຈິ" ໝາຍເຖິງຂຸມທີ່ກວ້າງ,ເລິກຫລາຍ ຫລືເຫວເລິກທີ່ບໍ່ມີກົ້ນເຫວ.

- ໃນພະຄັມພີ, ຄຳວ່າ "ອະເວຈິ" ຄືສະຖານທີ່ແຫ່ງການລົງໂທດ.
- ຕົວຢ່າງເຊັ່ນ, ເມື່ອພຣະເຢຊູຊົງສັ່ງໃຫ້ເຫລົ່າວິນຍານຊົ່ວໃຫ້ອອກຈາກຜູ້ຊາຍຄົນໜຶ່ງ,
  ພວກມັນໄດ້ຂໍຮ້ອງພຣະອົງວ່າຢ່າສົ່ງພວກມັນໄປຍັງອະເວຈິເລີຍ.
- ຄຳວ່າ "ອະເວຈິ" ອາດແປໄດ້ອີກວ່າ "ຂຸມທີ່ບໍ່ມີກົ້ນ" ຫລື "ເຫວເຫລິກ"
- ຄຳນີ້ຄວນໃຊ້ຄຳແປທີ່ຕ່າງໄປຈາກຄຳວ່າ "hades," "sheol," ຫລື "hell."

## ອັດຊີເຣຍ, ຄົນອັດຊີເຣຍ, ອານາຈັກອັດຊີເຣຍ

### ຂໍ້ເທັດຈິງ

ອັດຊີເຣຍເປັນຊົນຊາດທີ່ມີອຳນາດຫລາຍໃນສະໄໝທີ່ຄົນອິສະຣາເອນອາໃສຢູ່ໃນແຜ່ນດິນການາອານ.
ອານາຈັກອັດຊີເຣຍເປັນກຸ່ມປະເທດກຸ່ມໜຶ່ງໃນປະເທດຕ່າງໆ ທີ່ຖືກປົກຄອງໂດຍກະສັດອັດຊີເຣຍ.

- ປະເທດອັດຊີເຣຍຕັ້ງຢູ່ໃນພື້ນທີ່ທາງພາກເໜືອຂອງປະເທດອີຣັກໃນປະຈຸບັນນີ້.
- ຄົນອັດຊີເຣຍຕໍ່ສູ້ກັບຄົນອິດສະຣາເອນຫລາຍຄັ້ງໃນປະຫວັດສາດຂອງພວກເຂົາ.
- ໃນປີ 722 ກ.ຄ.ສ.
  ຄົນອັດຊີເຣຍໄດ້ໄຊຊະນະເດັດດ່ຽວເໜືອອານາຈັກອິສະຣາເອນແລະບັງຄັບໃຫ້ຄົນອິສະຣາເອນຢ່າງຫລວງຫລາຍຍ້າຍໄປຢູ່ໃນອັດຊີເຣຍ.
- ຄົນອິສະຣາເອນທີ່ເຫລືອໃນປະເທດໄດ້ແຕ່ງງານກັບຄົນຕ່າງຊາດທີ່ຄົນອັດຊີເຣຍນຳເຂົ້າມາຈາກສະມາເຣຍ.ໃຫ້ມາຢູ່ໃນອິສະຣາເອນ
  ເຊື້ອຊາຍຂອງຄົນຊີເຣຍທີ່ແຕ່ງງານກັບຄົນຕ່າງຊາດນັ້ນ ພາຍຫລັງຖືກເອີ້ນວ່າຄົນສະມາເຣຍ.

## ອັນທີໂອກ

### ຂໍ້ເທັດຈິງ

ອັນທີໂອກ ເປັນຊື່ເມືອງສອງເມືອງໃນພັນທະສັນຍາໃໝ່. ເມືອງໜຶ່ງຢູ່ໃນແຄ້ວນຊີເຣຍ ໃກ້ກັບຊາຍຝັ່ງທະເລເມດິເຕຣາເນ
ອີກເມືອງຕັ້ງຢູ່ໃນແຄວ້ນປີຊິເດຍ,ຂອງອານາຈັກໂຣມ ໃກ້ກັບເມືອງໂກໂລຊາຍ.

- ຄຣິສຕະຈັກທ້ອງຖິ່ນໃນເມືອງອັນທີໂອກ ແຄ້ວນຊີເຣຍ ເປັນຄຣິສຕະຈັກແຫ່ງທຳອິດທີ່ບັນດາຜູ້ເຊື່ອຖືໃນພຣະເຢຊູເຈົ້າຖືກເອີ້ນວ່າ
  "ຄຣິສະຕຽນ" ຄຣິສຕະຈັກທີ່ນັ້ນໄດ້ຮ້ອນຮົນໃນການສົ່ງຜູ້ປະກາດຂ່າວປະເສີດໄປຍັງຄົນຕ່າງຊາດ.


generated on Thu Jul 10 08:45:04 2025

- ພວກຜູ້ນຳຄຣິສຕະຈັກໃນກຸງເຢຣູຊາເລັມໄດ້ສົ່ງຈົດໝາຍສະບັບໜຶ່ງໄປຍັງຜູ້ເຊື່ອຖືໃນຄຣິສຕະຈັກທີ່ເມືອງອັນທີໂອກ ແລ້ວນຊີເຣຍເພື່ອຊ່ວຍໃຫ້ພວກເຂົາຮູ້ວ່າໃນການທີ່ຈະເປັນຄຣິສະຕຽນນັ້ນ ພວກເຂົາບໍ່ຕ້ອງຮັກສາບົດບັນຍັດຂອງໂມເຊ.
- ໂປໂລ ບາຣະນາບັດແລະໂຢຮັນມາຣະໂກ ໄດ້ເດີນທາງໄປຍັງເມືອງອັນທີໂອກ ແລ້ວນປີ່ສີເດຍເພື່ອປະກາດຂ່າວປະເສີດ. ມີຄົນຍິວບາງຄົນຈາກເມືອງອື່ນໆ
ມາສ້າງປັນຫາກໍ່ກວນແລະພະຍາຍາມຂ້າໂປໂລແຕ່ມີຄົນຫລວງຫລາຍທັງຄົນຍິວແລະຄົນຕ່າງຊາດໄດ້ຟັງຄຳສອນແລະໄດ້ເຊື່ອໃນພຣະເຢຊູເຈົ້າ.

## ອັນນາດ

### ຂໍ້ເທັດຈິງ

ອັນນາດ ເປັນມະຫາປະໂລຫິດໃນກຸງເຢຣູຊາເລັມເປັນເວລາ 10 ປີປະມານປີ ຄ.ສ. 6 ເຖິງ ຄ.ສ. 15
ແລະຖືກຣັຖະບານໂຣມປົດອອກຈາກການເປັນປະໂລຫິດ, ແຕ່ເຂົາກະຢູ່ເປັນຜູ້ນຳທີ່ຊົງອິດທິພົນຕໍ່ຄົນຍິວຕໍ່ໄປ.

- ອັນນາດ ເປັນພໍ່ເຖົ້າຂອງຄາຢາຟັດມະຫາປະໂລຫິດໃນສະໄໝທີ່ພຣະເຢຊູເຈົ້າຊົງທຳພັນທະກິດ.
- ຫລັງຈາກມະຫາປະໂລຫິດກະສຽນແລ້ວ, ພວກເຂົາຍັງຄົງໃຫ້ໃຊ້ຊື່ຕຳແໜ່ງຕໍ່ໄປ, ພ້ອມກັບມີໜ້າທີ່ຮັບຜິດຊອບຢູ່ນຳ, ດ້ງນັ້ນອັນນາດຍັງຖືກເອີ້ນວ່າເປັນມະຫາປະໂລຫິດຢູ່ໃນຍຸກ ຄາຢາຟັດແລະຄົນອື່ນໆ.
- ໃນຊ່ວງການແກ້ຄະດີຕໍ່ໜ້າ ຄາຢາຟັດ ພຣະເຢຊູເຈົ້າຖືກນຳມາໃຫ້ອັນນາດ ໄຕ່ສວນກ່ອນ.

## ອັນເດອາ

### ຂໍ້ເທັດຈິງ

ອັນເດອາ ເປັນໜຶ່ງໃນຜູ້ຊາຍສິບສອງຄົນທີ່ພຣະເຢຊູຊົງໄດ້ເລືອກໃຫ້ເປັນສາວົກທີ່ໃກ້ຊິດທີ່ສຸດ(ພາຍຫຼັງເອີ້ນວ່າພວກອັກຄະທູດ).

- ອ້າຍຂອງອັນເດອາຄືຊີໂມນ ເປໂຕ ພວກເຂົາທັ້ງສອງເປັນຊາວປະມົງ.
- ເປໂຕແລະອັນເດອາກຳລັງຫາປາໃນທະເລກາລີເລ ເມື່ອພຣະເຢຊູຊົງຮຽກເອີ້ນພວກເຂົາໃຫ້ມາເປັນສາວົກຂອງພຣະອົງ.
- ກ່ອນທີ່ເປໂຕແລະອັນເດອາຈະພົບກັບພຣະເຢຊູ ພວກເຂົາເຄີຍເປັນສາວົກຂອງໂຢຮັນຜູ້ໃຫ້ບັບຕິສະມາມາກ່ອນ.

## ອັບຊາໂລມ

### ຂໍ້ເທັດຈິງ

ອັບຊາໂລມເປັນລູກຊາຍທີ່ສາມຂອງກະສັດດາວິດ. ທ່ານໄດ້ຊື່ວ່າເປັນຄົນຮູບງາມແລະເຈົ້າອາລົມ.

- ເມືອ ຕາມາ ນ້ອງສາວຂອງອັບຊາໂລມຖືກຂົ່ມຂືນໂດຍອໍາໂນນຊຶ່ງເປັນພີ່ນ້ອງຕ່າງແມ່, ອັບຊາໂລມໄດ້ວາງແຜນຂ້າອໍາໂນນ.
- ຫຼັງຈາກທີ່ຂ້າອໍາໂນນແລ້ວ ອັບຊາໂລມໄດ້ໜີໄປຢັງແຄວ້ນຂອງຄົນເກຊູ (ຊຶ່ງ ມາອາຄາ ແມ່ຂອງທ່ານມາຈາກນັ້ນ) ແລະຢູ່ບ່ອນນັ້ນສາມປີ. ແລ້ວກະສັດດາວິດຊົງໄດ້ບອກໃຫ້ທ່ານກັບມາຍັງກຸງເຢຣູຊາເລັມ, ແຕ່ຊົງບໍ່ອະນຸຍາດໃຫ້ເຂົ້າເຝົ້າເປັນເວລາສອງປີ.
- ອັບຊາໂລມໄດ້ຊັກຊວນປະຊາຊົນບາງສ່ວນໃຫ້ຕໍ່ຕ້ານກະສັດດາວິດແລະກະບົດຕໍ່ພະອົງ.
- ທະຫານຂອງດາວິດໄດ້ຕໍ່ສູ້ກັບອັບຊາໂລມແລະໄດ້ຂ້າທ່ານເສຍ ດາວິດເສຍໃຈເປັນຢ່າງຫນັກຕໍ່ເຫດການນີ.

## ອັບຣາຮາມ, ອັບຣາມ

### ຂໍ້ເທັດຈິງ

ອັບຣາມເປັນຄົນເຄລະດຽນມາຈາກເມືອງອຸເຣ ເປັນຜູ້ໄດ້ຮັບການຊົງເລືອກຈາກພຣະເຈົ້າໃຫ້ເປັນບັນພະບຸລຸດຂອງຄົນອິສະຣາເອນ. ພຣະເຈົ້າຊົງໄດ້ປ່ຽນຊື່ຂອງທ່ານເປັນ "ອັບຣາຮາມ."

- ຊື "ອັບຣາມ" ໝາຍຄວາມວ່າ "ພໍ່ທີ່ໄດ້ຮັບການຍົກຍ້ອງ"
- "ອັບຣາຮາມ" ໝາຍຄວາມວ່າ "ພໍ່ຂອງຄົນທັ້ງຫຼາຍ."
- ພຣະເຈົ້າຊົງໄດ້ສັນຍາກັບຣັບຣາຮາມວ່າ ທ່ານຈະມີເຊື້ອສາຍຫລວງຫລາຍ, ຊຶ່ງພວກທ່ານທັ້ງຫຼາຍຈະກາຍເປັນຊົນຊາດໃຫຍ່.
- ອັບຣາຮາມເຊື່ອໃນພຣະເຈົ້າແລະເຊື່ອຟັງພຣະອົງ. ພຣະເຈົ້າຊົງໄດ້ນຳອັບຣາຮາມໃຫ້ຍ້າຍອອກຈາກຖິ່ນຂອງຄົນເຊັ່ນເດຍໄປຢັງແຜ່ນດິນການາອານ.
- ໃນຂະນະທີ່ອາໃສຢູ່ໃນແຜ່ນດິນການາອານ, ເມື່ອພວກທ່ານເຖົ້າແກ່ຫລາຍແລ້ວ, ອັບຣາຮາມແລະນາງຊາຣາພັນລະຍາຂອງທ່ານກໍ່ໄດ້ມີບຸດຊາຍຄົນໜຶ່ງຊື ອິຊາກ.


generated on Thu Jul 10 08:45:04 2025

## ອັຍເນ

### ຂໍ້ເທັດຈິງ

ໃນພຣະສັນຍາເດີມ ອັຍເນ ເປັນລູກອ້າຍລູກນ້ອງຂອງກະສັດໂຊນ.

- ອັຍເນເປັນຜູ້ບັນຊາການກອງທະຫານຂອງໂຊນ, ແລະໄດ້ພາເດັກໜຸ່ມດາວິດໄປເຂົ້າເຝົ້າໂຊນຫລັງຈາກທີ່ດາວິດໄດ້ຂ້າຍັກໃຫ່ຍ ໂກລີອາດ.
- ຫລັງຈາກທີ່ກະສັດໂຊນເສຍຊີວິດ, ອັຍເນໄດ້ແຕ່ງຕັ້ງອີດະໂບເສັດລູກຊາຍຂອງໂຊນຂຶ້ນເປັນກະສັດຂອງອິສະຣາເອນໃນຂະນະທີ່ດາວິດໄດ້ຮັບການແຕ່ງໃຫ້ເປັນກະສັດຂອງຢູດາ.
- ພາຍຫລັງມາ, ໂຢອາບຊຶ່ງເປັນຜູ້ບັນຊາການທະຫານຂອງດາວິດໄດ້ວາງແຜນຂ້າອັຍເນ.

## ອາກຕາເຊເຊັດ ຫລື( ອາກທາເຊີຊີ )

### ຂໍ້ເທັດຈິງ

ອາກຕາເຊເຊັດ ຫລື( ອາກທາເຊີຊີ ເປັນກະສັດຜູ້ປົກຄອງອານາຈັກເປີເຊຍປະມານປີ 464 ກ.ຄ.ສ. ເຖິງ 424 ກ.ຄ.ສ.

- ໃນສະໄໝການປົກຄອງຂອງອາກຕາເຊເຊັດ( ອາກທາເຊີຊີ ) ປະຊາຊົນອິສະຣາເອນຈາກຢູດາຕົນເປັນຊະເລີຍໃນກຸງບາບີໂລນ ຊຶ່ງຢູ່ພາຍໃຕ້ອຳນາດຂອງເປີເຊຍໃນເວລານັ້ນ.
- ອາກຕາເຊເຊັດຊົງອະນຸຍາດໃຫ້ປະໂຣຫິດ ເອຊະຣາ ແລະຜູ້ນຳຊາວຢິວອື່ນໆ ອອກຈາກກຸງບາບີໂລນກັບໄປຍັງກຸງເຢຣູຊາເລັມເພື່ອສັ່ງສອນພຣະບັນຍັດຂອງພຣະເຈົ້າໃຫ້ແກ່ຊາວອິສະຣາເອນ.
- ຕໍ່ມາພາຍຫລັງ ອາກຕາເຊເຊັດ ຊົງໄດ້ອະນຸຍາດໃຫ້ພະນັກງານຖືຈອກຂອງພຣະອົງຄື ເນເຫມີຢາກັບມາຍັງກຸງເຢຣູຊາເລັມເພື່ອນຳຊາວຢິວໃນການສ້ອມແປງກຳແພງຮອບໆເມືອງ.
- ເປັນເພາະກຸງບາບີໂລນຢູ່ພາຍໃຕ້ການປົກຄອງຂອງເປີເຊຍບາງຄັ້ງອາກຕາເຊເຊັດຖືກເອີ້ນວ່າ " ກະສັດແຫ່ງບາບີໂລນ "
- ໃຫ້ສັງເກດວ່າອາກຕາເຊເຊັດເປັນຄົນລະຄົນກັບເຊີຊີ ( ອາຫາສູເອຣັດ)

## ອາກີລາ

### ຂໍ້ເທັດຈິງ

ຫ່ານ ອາກີລາ ແມ່ນຊາວຄຣິສະຕຽນຊາວຢິວທີ່ມາຈາກແຂວງ ຟອນຕັດ, ເຊິ່ງຕັ້ງຢູ່ແຄມຝັ່ງທະເລທາງໃຕ້ຂອງທະເລດຳ.

- ອາກີລາ ແລະ ປຣິສິລາ ອາໃສຢູ່ໃນກຸງໂຣມ , ອີຕາລີເປັນເວລາ ໜຶ່ງ, ແຕ່ຕໍ່ມາເຈົ້າຊີວິດໂຣມ, ຄາໂລດີອາດ ໄດ້ບັງຄັບໃຫ້ຊາວຢິວທັ້ງໝົດຕ້ອງໜີອອກຈາກ ໂຣມ.
- ຫລັງຈາກນັ້ນອາກີລາແລະປຣິສິລາໄດ້ເດີນທາງໄປເມືອງໂກຣິນໂທ ບ່ອນທີ່ເຂົາເຈົ້າໄດ້ພົບກັບອັກຄະສາວົກໂປໂລ.
- ພວກເຂົາເຮັດວຽກເປັນຜູ້ສ້າງເຕັ້ນກັບໂປໂລ, ຜ້ອມທັ້ງຊ່ວຍລາວໃນວຽກງານເຜີຍແຜ່ຂອງລາວ.
- ທັ້ງສອງ ອາກີລາ ແລະ ປຣິສິລາ ໄດ້ສອນຜູ້ທີ່ເຊື່ອຄວາມຈິງກ່ຽວກັບພຣະເຢຊູ; ໜຶ່ງໃນຜູ້ທີ່ເຊື່ອນັ້ນແມ່ນຄຣູສອນທີ່ມີພອນສະຫວັນທີ່ມີຊື່ວ່າ ອະໂປໂລ.

## ອາງຸ່ນ

### ນິຍາມ

ອາງຸ່ນ ເປັນຜົນລະໄມ້ຂະໜາດນ້ອຍ,ກົມ, ຜິວລຽບທີ່ເຕີບຕົວໃນພວງອາງຸ່ນ.ນ້ຳຂອງໝາກອາງຸ່ນຖືກນຳມາໃຊ້ໃນການເຮັດເຫລົ້າອາງຸ່ນ.

- ຫມາກອາງຸ່ນມີຫລາຍສີແຕກຕ່າງກັນ, ເຊັ່ນສີຂຽວ, ສີມ່ວງ,ຫລືສີແດງ.
- ຫມາກອາງຸ່ນສາມາດມີຂະໜາດປະມານໜຶ່ງເຖິງສາມຊັ່ງຕີແມັດ.
- ຄົນປູກອາງຸ່ນໃນສວນທີ່ເອີ້ນວ່າສວນອາງຸ່ນ ໂດຍປົກກະຕິຈະປະກອບດ້ວຍງ່າອາງຸ່ນເປັນແຖວຍາວ.
- ໝາກອາງຸ່ນເປັນອາຫານສຳຄັນໃນສະໄໝພຣະຄັມພີແລະການມີສວນອາງຸ່ນເປັນສັນຍາລັກຂອງຄວາມຮັ່ງມີ.
- ເພື່ອທີ່ຈະເກັບໝາກອາງຸ່ນຈາກການເນົ່າເສຍ, ປະຊາຊົນຈະຕາກແຫ້ງພວກມັນ ອາງຸ່ນແຫ້ງເອີ້ນວ່າ "ລູກເກດ" ແລະພວກມັນຖືກໃຊ້ເຮັດເຂົ້າໜົມເຄັກລູກເກດ.
- ພຣະເຢຊູຊົງເຫຼົ້າຄຳອຸປະມາກ່ຽວກັບສວນອາງຸ່ນເພິ່ນສອນ

ພວກສາວົກຂອງພຣະອົງກ່ຽວກັບອານາຈັກຂອງພຣະເຈົ້າ.


generated on Thu Jul 10 08:45:04 2025

## ອາຊາ

### ຂໍ້ເທັດຈິງ

ອາຊາເປັນກະສັດຜູ້ປົກຄອງອານາຈັກຢູດາ ເປັນເວລາສີ່ສິບປີ ໃນປີ 913-873 ກ.ຄ.ສ.

- ກະສັດອາຊາເປັນກະສັດທີ່ດີ ພຣະອົງເປັນຜູ້ໜຶ່ງທີ່ກຳຈັດຮູບເຄົາລົບ

ຫຼືພຣະເຈົ້າປອມທັ້ງຫລາຍອອກໄປ ແລະເຮັດໃຫ້ຊາວອິສະຣາເອນເລີ່ມກັບຄືນນະມັດສະການພຣະຢາເວອີກໃໝ່.

- ພຣະຢາເວ ຊົງໃຫ້ກະສັດ ອາຊາ ມີໄຊຊະນະໃນການເຮັດສົງຄາມກັບຊົນຊາດອື່ນໆອີກ.
- ໃນຕອນສຸດທ້າຍຂອງຣາຊະການ ກະສັດອາຊາຊົງບໍ່ໄວ້ວາງໃຈໃນພຣະຢາເວ
  ແລະປະຊວນດ້ວຍໂຣກຮ້າຍຈົນກະທັ້ງເຖິງສະຫວັນນະຄົດ.

## ອາດຊະຍາກຳ, ອາດຊະຍາກອນ

### ນິຍາມ

ຄຳວ່າ "ອາດຊະຍາກຳ"ມັກກ່າວເຖິງບາບທີ່ກ່ຽວຂ້ອງກັບການລະເມີດກົດໝາຍຂອງປະເທດ ຫຼື ລັດຖະບານ
ຄຳວ່າ"ອາດຊະຍາກອນ"ກ່າວເຖິງບຸກຄົນທີ່ກະທຳຄວາມຜິດທາງອາດຊະຍາກຳ.

- ປະເພດຂອງ ອາດຊະຍາກຳ ໄດ້ແກ່ ສິ່ງຕ່າງໆເຊັ່ນ ການຂ້າຄົນ ຫຼື ການລັກຊັບສິນຂອງຄົນອື່ນ.
- ອາດຊະຍາກອນ ທົ່ວໄປເມື່ອຖືກຈັບໄດ້ແລ້ວ ກໍຈະຖືກຈ່ອງຈຳໃນລັກສະນະຕ່າງໆເຊັ່ນ ຄຸກ ເປັນຕົ້ນ.
- ໃນລະຍະເວລາຂອງພຣະຄັມພີ
  ອາດຊະຍາກອນບາງຄົນກາຍເປັນຜູ້ລີ້ໄພເດີນຈາກທີ່ໜຶ່ງໄປຍັງອີກທີ່ໜຶ່ງເພື່ອໜີຄົນທີ່ຕ້ອງການທຳລາຍພວກເຂົາເພື່ອເປັນການແກ້ແຄ້ນອາດຊະຍາກຳຂອ

## ອາທາລີຢາ

### ຂໍ້ເທັດຈິງ

ອາທາລີຢາເປັນມະເຫສີທີ່ຊົ່ວຮ້າຍຂອງກະສັດເຢໂຮຣາມແຫ່ງຢູດາ ນາງເປັນຫລານສາວຂອງກະສັດອົມຣີຜູ້ຊົ່ວຮ້າຍແຫ່ງອິສະຣາເອນ.

- ອາທາລີຢາ ໂອຣົດຂອງພຣະນາງອາຮາຊີຢາໄດ້ຂຶ້ນເປັນກະສັດຫລັງຈາກທີ່ກະສັດເຢໂຮຣາມສະຫວັນນະຄົດ.
- ເມື່ອກະສັດອາຫັດຊີຢາ ໂອຣົດຂອງພຣະນາງໄດ້ສະຫວັນນະຄົດ ອາມາລີຢາໄດ້ວາງແຜນທີ່ຈະຂ້າຕະກຸນຂອງກະສັດທີ່ເຫລືອຢູ່ເສຍ.
- ແຕ່ໂຢອາດ ຫລານຜູ້ນ້ອຍຂອງພຣະນາງອາທາລີຢາໄດ້ຖືກຊ້ອນໄວ້ດ້ວຍປ້າຂອງລາວ ແລະໄດ້ລອດພົ້ນຈາກການຖືກຂ້າ
  ຕໍ່ມາພາຍຫລັງໂຢອາດໄດ້ກາຍເປັນກະສັດ.

## ອານາຈັກ

### ນິຍາມ

ອານາຈັກຄືກຸ່ມຄົນທີ່ຖືກປົກຄອງໂດຍກະສັດອົງໜຶ່ງ
ແລະຍັງໝາຍເຖິງເຂດແດນຫລືເຂດແດນທາງການເມືອງທີ່ກະສັດຫລືຜູ້ປົກຄອງຄົນອື່ນໄດ້ຄວບຄຸມແລະມີອຳນາດຢູ່ເໜືອ.

- ອານາຈັກສາມາດມີຂະໜາດໃດກໍ່ໄດ້ທາງພູມສັນຖານ ກະສັດອົງໜຶ່ງອາດຈະປົກຄອງຊົນຊາດຫນຶ່ງຫລື
  ປະເທດຫນຶ່ງຫລືເມືອງໜຶ່ງເທົ່ານັ້ນ.
- ຄຳວ່າ "ອານາຈັກ" ຍັງໝາຍເຖິງການຄອບຄອງຫລືສິດອຳນາດໃນຝ່າຍຈິດວິນຍານຄືກັບຄຳວ່າ "ອານາຈັກຂອງພຣະເຈົ້າ".
- ພຣະເຈົ້າຊົງປົກຄອງທຸກສິ່ງທີ່ພຣະອົງຊົງສ້າງທັ້ງໝົດ ແຕ່ຄຳວ່າ "ອານາຈັກຂອງພຣະເຈົ້າ"
  ໝາຍເຖິງການປົກຄອງຂອງພຣະອົງແລະສິດອຳນາດຢູ່ເໜືອປະຊາກອນທີ່ໄດ້ເຊື່ອໃນພຣະເຢຊູແລະຜູ້ທີ່ໄດ້ຍອມຢູ່ພາຍໃຕ້ສິດອຳນາດຂອງພຣະອົງ.
- ພຣະຄຳພີຍັງກ່າວເຖິງຊາຕານທີ່ມີ "ອານາຈັກ" ທີ່ມັນປົກຄອງຜຽງຊົ່ວຄາວເໜືອຫລາຍສິ່ງໃນແຜ່ນດິນໂລກນີ້
  ອານາຈັກຂອງມັນນັ້ນຊົ່ວຮ້າຍແລະຖືກເອີ້ນວ່າ "ຄວາມມືດ".

### ຄຳແນະນຳໃນການແປ

- ເມື່ອມີການກ່າວເຖິງເຂດແດນທີ່ປົກຄອງໂດຍກະສັດຄຳວ່າ "ອານາຈັກ" ສາມາດແປວ່າ "ປະເທດ".


generated on Thu Jul 10 08:45:04 2025

## ອານາຈັກຂອງພຣະເຈົ້າ, ອານາຈັກສະຫວັນ

### ນິຍາມ

ຄຳວ່າ "ອານາຈັກຂອງພຣະເຈົ້າ" ແລະ "ອານາຈັກສະຫວັນ"
ທັ້ງສອງຄຳໝາຍເຖິງການປົກຄອງແລະສິດອຳນາດຂອງພຣະເຈົ້າເໜືອປະຊາຊົນແລະເໜືອສິ່ງທີ່ພຣະອົງຊົງສ້າງທັ້ງປວງ.

- ຊາວຢິວມັກຈະໃຊ້ຄຳວ່າ "ສະຫວັນ" ເພື່ອເປັນການກ່າວເຖິງພຣະເຈົ້າ
  ເພື່ອເປັນການຫລີກລ້ຽງການກ່າວເຖິງພຣະນາມຂອງພຣະອົງໂດຍກົງ .
- ໃນພຣະຄຳພີໃໝ່ມັດທາຍໄດ້ຂຽນວ່າ ລາວໄດ້ກ່າວເຖິງອານາຈັກຂອງພຣະເຈົ້າວ່າເປັນ "ອານາຈັກສະຫວັນ"
  ເພາະວ່າຕົ້ນຕໍແລ້ວລາວຂຽນເຖິງຊາວຢິວ.
- ອານາຈັກຂອງພຣະເຈົ້າຫມາຍເຖິງພຣະເຈົ້າກຳລັງປົກຄອງເຫນືອປະຊາຊົນຝ່າຍວິນຍານກໍຄືການປົກຄອງເຫນືອທັ້ງໂລກ.
- ຜູ້ປະກາດຂ່າວປະເສີດໃນພຣະຄຳພີເດີມກ່າວວ່າ ພຣະເຈົ້າຈະສົ່ງພຣະເມຊີອາເພື່ອມາປົກຄອງດ້ວຍຄວາມຊອບທຳ
  ພຣະເຢຊູຄຣິສຕຄືພຣະບຸດຂອງພຣະເຈົ້າ,ແມ່ນພຣະເມຊີອາຜູ້ທີ່ຈະມາປົກຄອງອານາຈັກຂອງພຣະເຈົ້າຕະຫລອດໄປ.

### ຄຳແນະນຳໃນການແປ

- ຄວາມໝາຍຫົວໄປຄຳວ່າ "ອານາຈັກຂອງພຣະເຈົ້າ" ສາມາດແປໄດ້ວ່າ "ການປົກຄອງຂອງພຣະເຈົ້າ".

## ອານາຈັກອິດສະຣາເອນ

### ຂ້ເທັດຈິງ

ຄຳວ່າ "ອານາຈັກອິດສະຣາເອນ"
ຫມາຍເຖິງເຂດພາກເໜືອຂອງອິດສະຣາເອນເມື່ອສິບສອງເຜົ່າຂອງອິດສະຣາເອນຖືກແບ່ງອອກເປັນສອງອານາຈັກຫລັງຈາກກະສັດຊາໂລໂມນຊົ່ມພຣະຊົນ.

- ອານາຈັກຂອງອິດສະຣາເອນໃນຕອນເໜືອມີສິບເຜົ່າແລະອານາຈັກຢູດາຢູ່ທາງທິດໃຕ້ມີສອງເຜົ່າ.
- ເມືອງຫລວງຂອງອານາຈັກອິດສະຣາເອນແມ່ນເມືອງຊາມາເຣຍ ເຊິ່ງຢູ່ຫ່າງປະມານ 50 ກິໂລແມັດຈາກກຸງເຢຣູຊາເລັ້ມ
  ເມືອງຫລວງຂອງຢູດາ.
- ກະສັດທຸກພຣະອົງຂອງອານາຈັກອິດສະຣາເອນຊົ່ວຮ້າຍ ພວກເຂົາໃຫ້ປະຊາຊົນຮັບໃຊ້ຮູບເຄົ່າລົບແລະພະທຽມຕ່າງໆ.
- ພຣະເຈົ້າໄດ້ສົ່ງຊາວອັດຊີເຣຍໄປໂຈມຕີອານາຈັກອິດສະຣາເອນ
  ປະຊາຊົນອິດສະຣາເອນຈຳນວນຫລວງຫລາຍຖືກຈັບເປັນຊະເລີຍແລະຖືກກວາດຕ້ອນໄປໃຊ້ຊີວິດໃນອັດຊີເຣຍ
- ພວກອັດຊີເຣຍໄດ້ພາພວກຄົນຕ່າງຊາດເຂົ້າມາອາໄສຢູ່ຮ່ວມກັບປະຊາຊົນທີ່ເຫລືອຢູ່ພຽງເລັກນ້ອຍໃນອານາຈັກອິດສະຣາເອນ
  ຄົນຕ່າງຊາດເຫລົ່ານີ້ໄດ້ແຕ່ງງານກັບຊາວອິດສະຣາເອນແລະເຊື່ອສາຍຂອງພວກຊາຍຊາມາເຣຍ.

## ອາມອດ

### ຂ້ເທັດຈິງ

ອາມອດເປັນບິດາຂອງຜູ້ປະກາດພຣະຄັມ ອີຊາຢາ

- ທ່ານຖືກກ່າວເຖິງໃນພຣະຄັມພີພຽງຄັ້ງດຽວເພື່ອສະແດງເຖິງຫົມາຂອງ ອີຊາຢາວ່າ "ເປັນບຸດຊາຍຂອງອາມອດ."
- ຊື່ນີ້ແຕກຕ່າງຈາກຊື່ຂອງຜູ້ປະກາດພຣະຄັມ ອາໂມດແລະຄວນສະກົດຄຳນີ້ໃຫ້ແຕກຕ່າງກັນດ້ວຍ.

## ອາມາຊີຢາ

### ຂ້ເທັດຈິງ

ອາມາຊີຢາໄດ້ກາຍເປັນກະສັດປົກຄອງເຫນືອອານາຈັກຢູດາເມື່ອກະສັດໂຢອາດ,ພໍ່ຂອງເພິ,ຖືກເສຍຊີວິດ.

- ກະສັດ ອາມາຊີຢາໄດ້ປົກຄອງເໜືອຢູດາ ເປັນເວລາຊາວເກົ້າປີ, ຈາກປີ 796 ກ.ຄ.ສ. ເຖິງ 767 ກ.ຄ.ສ.
- ພຣະອົງຊົງເປັນກະສັດທີ່ດີ ແຕ່ພຣະອົງຊົງບໍ່ໄດ້ທຳລາຍສະຖານສູງທັ້ງຫຼາຍທີ່ຊົງໃຊ້ບູຊາຮູບເຄົ່າລົບ.
- ກະສັດອາມາຊີຢາ ຊົງໄດ້ປະຫານຢັນດາຄົນທີ່ມີສ່ວນໃນການປົງພຣະຊົນພຣະບິດາຂອງພຣະອົງ.
- ພຣະອົງຊົງເອົາຊະນະຄົນເອໂດມທີ່ກະບົດ ແລະທຳໃຫ້ພວກເຂົາຢູ່ພາຍໃຕ້ການປົກຄອງຂອງອານາຈັກຢູດາ.


generated on Thu Jul 10 08:45:04 2025

- ພຣະອົງຊົງຫ້າຫາຍກະສັດເຢໂຮອາດຂອງອິສະຣາເອນໃຫ້ມາສູ້ຮົບກັນ
  ແຕ່ກັບຜ່າຍແພ້.ກຳແພງເມືອງເຢຣູຊາເລັມສ່ວນນຶ່ງໄດ້ພັງລົງມາ ແລະພາຊະນະເງິນແລະຄຳທັງຫຼາຍຂອງພຣະວິຫານໄດ້ຖືກລັກໄປ.
- ຫຼາຍປີຕໍ່ມາກະສັດ ອາມາຊີຢາ ຊຶ່ງໄດ້ຫັນຫຼັງໃຫ້ພຣະຢາເວ
  ແລະມີບາງຄົນໃນກຸງເຢຣູຊາເລັມໄດ້ວາງແຜນຮ່ວມກັນແລະໄດ້ປົງພຣະຊົນພຣະອົງ.

## ອາມາເລກ, ຄົນອາມາເລກ

### ຂໍ້ເທັດຈິງ

ຄົນອາມາເລກເປັນກຸ່ມຄົນທີ່ເລ້ລ້ອນໝູ່ໜຶ່ງເຊິ່ງອາໃສຢູ່ທິວໄປໃນຕອນໃຕ້ຂອງແຜ່ນດິນຄານາອານ,
ຈາກທະເລຊາຍເນເກບໄປຈົນເຖິງອາລາເບຍ. ຄົນກຸ່ມນີ້ເປັນເຊື້ອສາຍຂອງອາມາເລກ ຜູ້ເປັນຫລານຊາຍຂອງເອຊາວ.

- ຄົນອາມາເລກເປັນສັດຕູຄູ່ອາຄາດຂອງຄົນອິສະຣາເອນຕັ້ງແຕ່ເມື່ອອິສະຣາເອນອາໃສ່ໃນແຜ່ນດິນຄານາອານຄັ້ງທຳອິດ.
- ບາງຄັ້ງຄຳວ່າ "ອາມາເລກ" ຖືກໃຊ້ເປັນພາບເລັ່ງເຖິງຄົນອາມາເລກທັ້ງໝົດ
- ຄັ້ງໜຶ່ງໃນສົງຄາມຕໍ່ສູ້ກັບຄົນອາມາເລກ, ເມື່ອໂມເຊຍົກມືຂອງທ່ານຂຶ້ນ ຄົນອິສະຣາເອນກໍໄດ້ຊັຍຊະນະ,
  ເມື່ອໂມເຊເມື່ອຍແລະມືຕົກລົງ ຄົນອິສະຣາເອນກໍພ່າຍແພ້.
  ດັ່ງນັ້ນອາໂລນແລະເຮີຈຶ່ງໄດ້ຈັບມືຂອງໂມເຊຍົກຂຶ້ນຈົນກະທັ້ງຄົນອິສະຣາເອນໄດ້ເອົາຊະນະກອງທັບອາມາເລກ.
- ທັ້ງກະສັດຊາອູນແລະກະສັດດາວິດໄດ້ເຄີຍນຳກອງທັບບຸກໂຈມຕີຄົນອາມາເລກ.
- ຄັ້ງໜຶ່ງຫລັງຈາກທີ່ມີຊັຍຊະນະເໜືອຄົນອາມາເລກ,ກະສັດຊາອູນບໍ່ເຊື່ອຟັງພຣະເຈົ້າໂດຍແອບເກັບຂອງທີ່ຍຶດມາໄດ້
  ແລະບໍ່ໄດ້ຂ້າກະສັດຂອງຄົນອາມາເລກຕາມທີ່ພຣະເຈົ້າໄດ້ບັນຊາໃຫ້ທຳ.

## ອາຣາບາ

### ຂໍ້ເທັດຈິງ

ໃນພຣະຄັມພີເດີມ ຄຳສັບຂອງຄຳວ່າ "ອາຣາບາ" ມັກຈະ ໝາຍ
ເຖິງເຂດທະເລຊາຍແລະທົ່ງພຽງທີ່ກວ້າງໃຫຍ່ໄພສານເຊິ່ງປະກອບມີຮ່ອມພູທີ່ຢູ່ອ້ອມຮອບແມ່ນ້ຳຈໍແດນແລະແຜ່ໄປທາງໃຕ້ໄປທາງທິດ ເໜືອ
ຂອງທະເລແດງ.

- ຊາວອິສະຣາເອນເດີນທາງຜ່ານເຂດທະເລຊາຍແຫ່ງນີ້ໃນການເດີນທາງຈາກປະເທດອີຢິບໄປຍັງແຜ່ນດິນການາອານ.
- "ທະເລຂອງ ອັບຣາບາ" ຍັງສາມາດຖືກແປເປັນ, "ທະເລທີ່ຕັ້ງຢູ່ໃນເຂດທະເລຊາຍອັບຣາບາ." ທະເລນີ້ມັກຖືກເອີ້ນວ່າ "ທະເລເກືອ"
  ຫລື "ທະເລຕາຍ."

## ອາຣາມ,ຊາວອາຣາມິນ , ອາຣາມມຽກ

### ຂໍ້ເທັດຈິງ

"ອາຣາມ" ແມ່ນຊື່ຂອງຜູ້ຊາຍສອງຄົນໃນພຣະຄັມພີເດີມ. ມັນຍັງແມ່ນຊື່ຂອງພາກພື້ນທາງຕາເວັນອອກສ່ຽງ ເໜືອ ຂອງການາ
ອານເຊິ່ງເປັນບ່ອນທີ່ປະເທດຊີເຣຍສະ ໄໝນີ້ຕັ້ງຢູ່.

- ປະຊາຊົນທີ່ອາໃສຢູ່ໃນ ອາຣາມ ໄດ້ກາຍເປັນທີ່ຮູ້ຈັກກັນວ່າ "ຊາວອາຣາມິນ" ແລະເວົ້າພາສາອາຣັບມຽກ.
  ພຣະເຢຊູແລະຊາວຍິວຄົນອື່ນໆໃນສະໄໝຂອງພຣະອົງຍັງເວົ້າພາສາອາຣັບມຽກ.
- ລູກຊາຍຄົນ ໜຶ່ງ ຂອງເຊມມີຊື່ວ່າອາຣາມ. ຊາຍອີກຄົນ ໜຶ່ງຊື່ວ່າອາຣາມເປັນລູກພີ່ນ້ອງຂອງນາງເຣເບກາ.
  ເປັນໄປໄດ້ວ່າຂົງເຂດອາຣາມໄດ້ຕັ້ງຊື່ຕາມຊາຍຄົນໜຶ່ງໃນສອງຄົນນີ.
- ອາຣາມ ຕໍ່ມາໄດ້ກາຍເປັນທີ່ຮູ້ຈັກໂດຍຊື່ ກຣີກ, "ຊີເຣຍ."
- ຄຳ ວ່າ "ຝາດເດ້ນອາຣາມ" ໝາຍຄວາມວ່າ "ທົ່ງພຽງຂອງ ອາຣາມ" ແລະມີທີ່ຕັ້ງຢູ່ໃນເຂດພາກ ເໜືອ ຂອງອາຣາມ.
- ຍາດພີ່ນ້ອງຂອງອັບຣາຮາມບາງຄົນອາໃສຢູ່ໃນເມືອງຮາລານເຊິ່ງຕັ້ງຢູ່ໃນ "ຝາດເດ້ນ ອາຣາມ."
- ໃນພຣະຄັມພີເດີມ, ບາງຄັ້ງ ຄຳ ສັບທີ່ວ່າ "ອາຣາມ" ແລະ "ຝາດເດ້ນອາຣາມ" ໝາຍເຖິງພາກພື້ນດຽວກັນ.
- ຄຳ ວ່າ "ອາຣາມ ນາຮາຣາອິມ" ອາດຈະໝາຍຄວາມວ່າ ອາຣາມ ແມ່ນ້ຳສອງສາຍ". ຂົງເຂດນີ້ຕັ້ງຢູ່ທາງພາກ ເໜືອ ຂອງ
  ເມໂຊໂປຣຕາເມຍ ແລະຢູ່ທາງທິດຕາເວັນອອກຂອງ "ຟອດເດ້ນອາຣາມ."


generated on Thu Jul 10 08:45:04 2025

## ອາຣາຣັດ

### ຂໍ້ເທັດຈິງ

ໃນພຣະຄັມພີ " ອາຣາຣັດ " ເປັນຊື່ໃຊ້ເອີ້ນດິນແດນ ອານາຈັກ ແລະຮ່ອມພູ.

- " ແຜ່ນດິນແຫ່ງອາຣາຣາດ " ອາດຕັ້ງຢູ່ໃນດິນແດນທາງພາກເໜືອຂອງປະເທດຕຸຣະກີຈົນເຖິງທຸກວັນນີ.
- ອາຣາຣັດ ເປັນທີ່ຮູ້ຈັກດີໃນຊື່ຂອງພູເຂົາທີ່ເຮືອຂອງໂນອາໄປຕິດຄ້າງຫລັງຈາກນ້ຳຖ້ວມໄດ້ເລີ່ມທີ່ຄ່ອຍໆລົດລົງ.
- ໃນປະຈຸບັນນີ ພູເຂົານັ້ນໄດ້ເອີ້ນວ່າ " ພູເຂົາອາຣາຣັດ " ມັກຈະຖືກຄິດວ່າແມ່ນບ່ອນດຽວກັນ " ພູເຂົາອາຣາຣັດ " ໃນພຣະຄັມພີ.

## ອາຣາເບຍ, ຊາວອາຣາເບຍ

### ຂໍ້ເທັດຈິງ

ອາຣາເບຍ ແມ່ນແຫຼມໃຫຍ່ທີ່ສຸດໃນໂລກ, ມີເນື້ອທີ່ເກືອບ 3,000,000 ກິໂລຕາແມັດ. ມັນຕັ້ງຢູ່ທາງທິດຕາເວັນອອກສຽງໃຕ້ຂອງອີສະຣາເອນ, ແລະມີຊາຍແດນຕິດກັບທະເລແດງ, ທະເລອາຣາເບຍ, ແລະອ່າວເປີເຊຍ.

- ຄຳວ່າ "ອາຣາເບຍ" ແມ່ນໃຊ້ເພື່ອໝາຍເຖິງຄົນທີ່ອາໃສຢູ່ໃນປະເທດອາຣາເບຍຫຼືກ່ຽວກັບບາງສິ່ງບາງຢ່າງທີ່ພົວພັນກັບອາຣາເບຍ.
- ຄົນທຳອິດທີ່ອາໃສຢູ່ປະເທດອາຣາເບຍແມ່ນລູກຫລານຂອງເຊມ.
  ຜູ້ອາໃສຢູ່ໃນຍຸກຍືນໆຂອງອາຣາເບຍລວມມີອິດຊະມາເອນລູກຊາຍຂອງອັບຣາຮາມແລະເຊື້ອສາຍຂອງລາວ,
  ພ້ອມທັງລູກຫລານຂອງເອຊາວ.
- ເຂດທະເລຊາຍບ່ອນທີ່ຊົນຊາດອິສະຣາເອນເດີນທາງມາເປັນເວລາ 40 ປີຕັ້ງຢູ່ປະເທດອາຣາເບຍ.
- ຫລັງຈາກກາຍເປັນຜູ້ທີ່ເຊື່ອໃນພຣະເຢຊູ, ອັກຄະສາວົກໂປໂລໄດ້ໃຊ້ເວລາສອງສາມປີຢູ່ໃນທະເລຊາຍຂອງອາຣະເບຍ.

## ອາວຸດ, ຍຸດທະພັນ

### ນິຍາມ

ຄຳວ່າ " ອາວຸດ " ໝາຍເຖິງອຸບປະກອນທີ່ທະຫານໃຊ້ເພື່ອຕໍ່ສູ້ໃນສົງຄາມແລະເພື່ອປົກປ້ອງຕົວເອງຈາກການໂຈມຕີຂອງສັດຕູ.
ແລະຍັງໃຊ້ໃນປຽບທຽບໝາຍເຖິງອາວຸດຝ່າຍວິນຍານໄດ້ອີກ.

- ອຸປະກອນອາວຸດທະຫານກໍມີ, ໝວກເຫລັກ, ໂລ້, ແລະເກາະປ້ອງກັນເອິກສະໜັບແຂງແລະດາບ.
- ອັກຄະທູດໂປໂລໃຊ້ຄຳນີເພື່ອປຽບທຽບກັບອາວຸດຝ່າຍຮ່າງກາຍກັບອາວຸດຝ່າຍຈິດວິນຍານ
  ທີ່ພຣະເຈົ້າປະທານໃຫ້ແກ່ຜູ້ທີ່ສັດທາເພື່ອຊ່ວຍພວກເຂົາໃນການຕໍ່ສູ້ໃນສົງຄາມຝ່າຍຈິດວິນຍານ.
- ອາວຸດຝ່າຍຈິດວິນຍານທີ່ພຣະເຈົ້າປະທານໃຫ້ແກ່ປະຊາຊົນຂອງພຣະອົງເພື່ອຕໍ່ສູ້ກັບຄວາມບາບແລະຊາຕານ, ລວມໄປເຖິງຄວາມຈິງ
  ຄວາມຊອບທຳ ຂ່າວປະເສີດແຫ່ງສັນຕິສຸກ, ຄວາມເຊື່ອ, ຄວາມລອດ,ແລະພຣະວິນຍານບໍຣິສຸດ.
- ຄຳນີໄດ້ຖືກແປເປັນຄຳທີ່ມີຄວາມໝາຍວ່າ " ອຸປະກອນຂອງທະຫານ " ຫລື " ເສື້ອເກາະປ້ອງກັນໃນການຮົບ " ຫລື "ເຄື່ອງປ້ອງກັນ " ຫລື " ຍຸດທະພັນຄົບຊຸດ. "

## ອາສະເກໂລນ

### ຂໍ້ເທັດຈິງ

ໃນສະໄໝພຣະຄັມພີ ອາສະເກໂລນເປັນເມືອງເອກຂອງຝີລິດສະຕິນທີ່ຕັ້ງຢູ່ແຖບຊາຍຝັ່ງທະເລເມດິເຕຣານຽນ
ແລະຍັງຄົງມີຢູ່ໃນອິສະຣາເອນຈົນທຸກວັນນີ.

- ເມືອງອາສະເກໂລນເປັນໜຶ່ງໃນຫ້າເມືອງທີ່ສຳຄັນທີ່ສຸດຂອງຝີລິດສະຕິນເຊັ່ນດຽວກັບເມືອງອາສະໂດດ, ເມືອງເອກອນ,
  ເມືອງກາດແລະເມືອງກາຊາ.
- ຄົນອິສະຣາເອນບໍ່ໄດ້ຮັບໄຊຊະນະຢ່າງເດັດຂາດເມື່ອຊາວເມືອງກາຊາອາສະເກໂລນ
  ບໍ່ວ່າອານາຈັກຢູດາຈະໄດ້ຄອງປະເທດຫຼາຍເຂົ້າເທລ໌ນີ.
- ອາສະເກໂລນໄດ້ຖືກຍຶດຄອງໂດຍຝີລິດສະຕິນເປັນເວລາຫລາຍຮ້ອຍປີ.


generated on Thu Jul 10 08:45:04 2025

## ອາສະໂດດ, ອາໂຊຕັດ

### ຂໍ້ເທັດຈິງ

ອາສະໂດດ ເປັນໜຶ່ງໃນຫ້າເມືອງທີ່ສຳຄັນທີ່ສຸດຂອງຊາວຟີລິດສະຕີນ ຕັ້ງຢູ່ໃນພາກຕາເວັນຕົນສຽງໃຕ້ຂອງການາອານ
ໃກ້ກັບທະເລເມດິເຕຣານຽນ, ຢູ່ລະຫວ່າງທາງຈາກເມືອງກາຊາໄປຍັງເມືອງໂຢປາ.

- ວິຫານຂອງພຣະດາກອນ ພຣະປອມຂອງຄົນຟີລິດສະຕີນ ຕັ້ງຢູ່ໃນເມືອງອາສະໂດດ.
- ພຣະເຈົ້າຊົງລົງໂທດຊາວເມືອງອາສະໂດດຄົນຟີລິດສະຕີນ ໄດ້ລັກເອົາຫີບພັນທະສັນຍາໄປ ແລະເອົາໄປໄວ້ໃນວິຫານພຣະນອກຮີດ
  ໃນເມືອງອາສະໂດດ.
- ຊື່ພາສາກຣີກຂອງເມືອງນີ້ຄື ອາສະໂດດເປັນໜຶ່ງໃນເມືອງທີ່ຜູ້ປະກາດຂ່າວປະເສີດ ຟີລິບໄດ້ປະກາດຂ່າວປະເສີດ.

## ອາສັບ

### ຂໍ້ເທັດຈິງ

ອາສັບເປັນປະໂຣຫິດຊາວເລວີແລະເປັນນັກດົນຕຣີທີ່ເກັ່ງ ເປັນຜູ້ແຕ່ງທຳນອງສຳລັບຍົດເພງສັນລະເສີນຂອງກະສັດດາວິດ.
ລາວໄດ້ຂຽນເພງສັນລະເສີນຂອງຕົວເອງອີກດ້ວຍ.

- ອາສັບ ໄດ້ຮັບການແຕ່ງຕັ້ງຈາກກະສັດດາວິດໃຫ້ເປັນຜູ້ໜຶ່ງໃນສາມນັກດົນຕຣີທີ່ຮັບຜິດຊອບໃນການຈັດຕຽມເພງຕ່າງໆ ສຳລັບນະມັດ

ສະການໃນພຣະວິຫານ ບາງເພງກໍເປັນພິທີກອນອີກດ້ວຍ.

- ອາສັບ ໄດ້ຝຶກລູກຊາຍທັ້ງຫລາຍຂອງລາວ ໃຫ້ຮັບຜິດຊອບໜ້າທີ່ນີ້ຕໍ່ໄປ, ໃນການເຫລັ່ນເຄື່ອງດົນຕີຕ່າງໆ
  ແລະການພິທີກອນໃນພຣະວິຫານ.
- ເຄື່ອງດົນຕຣີບາງອັນລວມເຖິງ ປີ, ພິນ, ເຂົ່າສັດ, ແລະສາບ.
- ເພງສັນລະເສີນ ບົດທີ 50 ແລະເພງສັນລະເສີນ ບົດທີ 73-88 ໄດ້ບອກກ່າວວ່າມາຈາກ ອາສັບ
  ອາດເປັນໄປໄດ້ວ່າເພງສັນລະເສີນເຫລົ່ານີ້ບາງເພງໄດ້ຂຽນຂຶ້ນໂດຍສະມາຊິກບາງຄົນໃນຄອບຄົວຂອງລາວເອງ.

## ອາຫານມື້ສຸດທ້າຍຂອງອົງພຣະຜູ້ເປັນເຈົ້າ

### ນິຍາມ

ຄຳວ່າ " ອາຫານມື້ສຸດທ້າຍຂອງອົງພຣະຜູ້ເປັນເຈົ້າ " ຖືກໃຊ້ໂດຍອັກຄະສາວົກໂປໂລເພື່ອອ້າງເຖິງມື້ປັດສະຄາທີ
ພຣະເຢຊູຊົງຮັບປະທານພ້ອມກັບພວກສາວົກຂອງພຣະອົງໃນຄືນທີ່ພຣະອົງຖືກຈັບໂດຍຜູ້ນຳຊາວຢິວ

- ໃນຊ່ວງເວລາມື້ອາຫານນີ້ ພຣະເຢຊູຊົງຫັກຂະໜົມປັງປັດສະຄາ ແລະ
  ຮ້ອງຂະໜົມປັງນີ້ວ່າເປັນພຣະກາຍຂອງພຣະອົງເຊິ່ງອີກບໍ່ດົນຈະຖືກຕີ ແລະ ຖືກຂ້າ
- ພຣະອົງຊົງຮ້ອງກເຫລົ້າອະງຸ່ນໃນຖ້ວຍນີ້ວ່າ ພຣະໂລຫິດຂອງພຣະອົງ
  ເຊິ່ງອີກບໍ່ດົນຈະຖືກເຮັດໃຫ້ເລືອດອອກເມື່ອພຣະອົງສິ້ນພຣະຊົນເພື່ອເປັນເຄື່ອງບູຊາໄຖ່ບາບ
- ໃນຈົດໝາຍທີ່ຂຽນເຖິງຜູ້ທີ່ເຊື່ອຊາວໂກລິນໂທ ອັກຄະສາວົກ ໂປໂລ
  ໄດ້ຕັ້ງອາຫານມື້ສຸດທ້າຍຂອງອົງພຣະຜູ້ເປັນເຈົ້າໃຫ້ເປັນການປະຕິບັດທີ່ໄດ້ເຮັດເປັນປະຈຳສຳລັບບັນດາຜູ້ທີ່ເຊື່ອໃນພຣະເຢຊູ

ຄຣິດຕະຈັກທັ່ງຫຼາຍໃນທຸກວັນນີ້ໃຊ້ຄຳວ່າ " ສິນມະຫາສະໜິດ " ເພື່ອອ້າງເຖິງອາຫານມື້ສຸດທ້າຍຂອງອົງພຣະຜູ້ເປັນເຈົ້າ ບາງເທື່ອກໍໃຊ້ຄຳວ່າ
" ອາຫານມື້ສຸດທ້າຍ " ດ້ວຍ

### ຄຳແນະນຳໃນການແປ

- ຄຳນີ້ສາມາດແປໄດ້ອີກວ່າຄຳ " ມື້ອາຫານຂອງອົງພຣະຜູ້ເປັນເຈົ້າ " ຫຼື " ມື້ອາຫານຂອງອົງພຣະຜູ້ເປັນເຈົ້າຂອງເຮົາ " ຫຼື "
  ມື້ອາຫານເພື່ລະນຶກຄິດເຖິງອົງພຣະຜູ້ເປັນເຈົ້າພຣະເຢຊູ "

## ອາເຊ

### ຂໍ້ເທັດຈິງ

ອາເຊເປັນລູກຊາຍຄົນທີແປດຂອງຢາໂຄບ. ເຊື້ອສາຍຂອງລາວໄດ້ກາຍເປັນໜຶ່ງໃນສິບສອງເຜົ່າຂອງອິສະຣາເອນຊຶ່ງມີຊື່ເຜົ່າວ່າ"ອາເຊ" ດ້ວຍ.

- ມານດາຂອງອາເຊຄືນາງຊິນປາ ເປັນສາວໃຊ້ຂອງນາງເລອາ.
- ຊື່ຂອງເຂົາມີຄວາມໝາຍວ່າ " ຄວາມສຸກ " ຫລື " ເປັນສຸກ. "
- ອາເຊບັ້ງເປັນຊື່ຂອງດິນແດນທີ່ມອບໃຫ້ແກ່ເຜົ່າອາເຊ ເມື່ອຄົນອິສະຣາເອນໄດ້ເຂົ້າໄປໃນແຜ່ນດິນແຫ່ງພັນທະສັນຍາ.

## ອາເຊຣາ,ຫລື( ອັດຊະຕາກ) ເສົາອາເຊ- ອັດໂທເຣັດ

### ຂໍ້ເທັດຈິງ

ອາເຊຣາ ເປັນຊື່ຂອງເຈົ້າແມ່ທີ່ຄົນການາອານກາບໄຫວ້ໃນສະໄໝພັນທະສັນຍາເດີມ " ອັດໂທເຣັດ "ອາດເປັນອີກຊື່ໜຶ່ງຂອງ " ອາເຊຣາ " ຫລືອາດຈະເປັນເຈົ້າແມ່ອີກອົງໜຶ່ງທີ່ຄ້າຍຄືກັນ.

- ຄຳວ່າ "ເສົາອາເຊຣາ "ເວົ້າເຖິງເສົາໄມ້ທີ່ຖືກແກະສະຫລັກຮູບຫລືຕົ້ນໄມ້ທີ່ຖືກແກະສະຫລັກເພື່ອໃຊ້ເປັນຕົວແທນຂອງເຈົ້າແມ່.
- ເສົາອາເຊຣາ ມັກຈະຕັ້ງຢູ່ໃກ້ໆ ແທ່ນບູຊາພຣະບາອານ,ຊຶ່ງຜູ້ຄົນຄິດວ່າເປັນສາມີຂອງເຈົ້າແມ່ອາເຊຣາ,
  ຄົນບາງກຸ່ມກາບໄຫວ້ພຣະບາອານເປັນເໝືອນເທບແຫ່ງດວງອາທິດ
  ແລະເຈົ້າແມ່ອາເຊຣາຫລືອັຢໂທເຣັດເປັນເໝືອນເຈົ້າແມ່ແຫ່ງດວງຈັນ.
- ພຣະເຈົ້າຊົງສັ່ງໃຫ້ຄົນອິສະຣາເອນທຳລາຍຮູບແກະສະຫລັກຂອງອາເຊຣາທັ້ງໝົດ.
- ຜູ້ນຳອິສະຣາເອນບາງຄົນເຊັ່ນກິເດໂອນ ກະສັດອາຊາແລະກະສັດໂຢຊີອາ ໄດ້ເຊື່ອຟັງພຣະເຈົ້າ
  ແລະໄດ້ພາປະຊາຊົນທຳລາຍຮູບເຄົາລົບເຫລົ່ານີ.
- ແຕ່ຜູ້ນຳອິສະຣາເອນຄົນອື່ນໆ ເຊັ່ນ ກະສັດໂຊໂລໂມນ ກະສັດນັດຊາເຊ ແລະກະສັດອາຮັບ ບໍ່ໄດ້ທຳລາຍເສົາອາເຊຣາ
  ແລະຍັງໄດ້ຊັກຊວນໃຫ້ປະຊາຊົນກາບໄຫວ້ຮູບເຄົາລົບເຫລົ່ານີ.

## ອາເບັນ

### ຂໍ້ເທັດຈິງ

ອາເບັນເປັນລູກຊາຍຜູ້ທີສອງຂອງອາດາມ ແລະເອວາ. ອາເບັນເປັນນ້ອງຊາຍຂອງກາອິນ.

- ອາເບັນເປັນຄົນລ້ຽງສັດ.
- ອາເບັນນຳເອົາສັດຂອງຕົນບາງສ່ວນໄປເປັນເຄື່ອງເຜົາບູຊາແກ່ພຣະເຈົ້າ.
- ພຣະເຈົ້າຊົງພໍພຣະທັຍໃນຕົວຂອງອາເບັນ ແລະເຄື່ອງເຜົາຖວາຍບູຊາຂອງເພິນ.
- ກາອິນຜູ້ທີ່ເປັນລູກຊາຍກົກຂອງອາດາມ ແລະເອວາ ເປັນຄົນຂ້າອາເບັນ.

## ອາແມນ, ແທ້ຈິງ,ແມ່ນແທ້ໆ

### ນິຍາມ

ຄຳວ່າ "ອາແມນ" ເປັນຄຳທີ່ໃຊ້ເນັ້ນຫຼືຢຽກຮ້ອງຄວາມສົນໃຈຕໍ່ສິ່ງທີ່ບຸກຄົນນັ້ນໄດ້ເວົ້າ,ມັກຈະໃຊ້ໃນຕອນທ້າຍຂອງຄຳອະທິຖານ
ບາງຄັ້ງຄຳນີ້ຖືກແປວ່າ "ແທ້ຈິງ."

- ເມື່ອໃຊ້ໃນຕອນຈົບຂອງຄຳອະທິຖານ ຄຳວ່າ "ອາແມນ" ເປັນການສື່ເຖິງການເຫັນດ້ວຍກັບຄຳອະທິຖານ
  ຫຼືສະແດງເຖິງການປາດຖະໜາຫຼືຢາກໃຫ້ຄຳອະທິຖານນັ້ນສຳເລັດ.
- ໃນຄຳສອນ ພຣະເຢຊູໃຊ້ຄຳວ່າ "ອາແມນ" ເພື່ອເນັ້ນເຖິງຄວາມຈິງໃນສິ່ງທີ່ພຣະອົງເວົ້າ.ພຣະອົງມັກຈະຕາມດ້ວຍປະໂຫຍກທີ່ວ່າ
  "ແລະເຮົາບອກແກ່ທ່ານວ່າ" ເພື່ອເລີ່ມສອນຕໍ່ໄປທີ່ກ່ຽວຂ້ອງກັບສິ່ງທີ່ພຣະອົງໄດ້ສັ່ງສອນໄປແລ້ວ.
- ເມື່ອພຣະເຢຊູໃຊ້ຄຳວ່າ "ອາແມນ" ໃນລັກສະນະນີ ພຣະຄັມພີພາສາອັງກິດບາງສະບັບ(ແລະສະບັບULB)ແປຄຳນີ້ວ່າ "ແທ້ຈິງ" ຫຼື
  "ຈິງໆ."
- ອີກຄຳໜຶ່ງທີ່ໝາຍຄວາມວ່າ "ແທ້ຈິງ" ບາງຄັ້ງກໍແປວ່າ "ແນ່ນອນ" ຫຼື "ແມ່ນແລ້ວ"
  ແລະຄຳນີ້ໄດ້ຖືກໃຊ້ເພື່ອເນັ້ນວ່າຜູ້ເວົ້າກຳລັງເວົ້າຫຍັງ.


generated on Thu Jul 10 08:45:04 2025

### ຂໍ້ແນະນຳໃນການແປ

- ໃຫ້ພິຈາລະນາເບິ່ງວ່າພາສາທີ່ຈະແປນັ້ນມີຄຳຫຼືຄຳເວົ້າພິເສດທີ່ຈະໃຊ້ເນັ້ນບາງສິ່ງທີ່ໄດ້ເວົ້າໄປແລ້ວຫຼືບໍ່.
- ເມື່ອໃຊ້ໃນຕອນທ້າຍຂອງຄຳອະທິຖານຫຼືເພື່ອຢືນຢັນບາງສິ່ງ "ອາແມນ" ກໍສາມາດແປໄດ້ອີກຢ່າງວ່າ "ຂໍໃຫ້ເປັນດັ່ງນັ້ນ" ຫຼື "ຂໍໃຫ້ສິ່ງນີ້ເກີດຂຶ້ນ" ຫຼື "ນັ້ນເປັນເລື່ອງຈິງ."
- ເມື່ອພຣະເຢຊູເວົ້າວ່າ "ເຮົາບອກຄວາມຈິງແກ່ທ່ານວ່າ" ກໍສາມາດແປໄດ້ອີກຢ່າງວ່າ "ເຮົາບອກທ່ານຢ່າງຈິງໃຈວ່າ" ຫຼື "ນັ້ນຄືຄວາມຈິງແລະເຮົາຂໍບອກທ່ານວ່າ."
- ຄຳເວົ້າທີ່ວ່າ "ແທ້ຈິງເຮົາບອກທ່ານວ່າ" ອາດແປໄດ້ອີກວ່າ "ເຮົາບອກເລື່ອງນີ້ແກ່ທ່ານຢ່າງຈິງໃຈວ່າ" ຫຼື "ເຮົາບອກເລື່ອງນີ້ແກ່ທ່ານດ້ວຍໃຈຮ້ອນຮົນວ່າ" ຫຼື "ສິ່ງທີ່ເຮົາກຳລັງບອກແກ່ທ່ານເປັນຄວາມຈິງ."

## ອາໂປໂລ

### ຂໍ້ເທັດຈິງ

ອາໂປໂລເປັນຄົນຢິວທີ່ມາຈາກເມືອງອາເລັກຊານເດຍໃນອີຢິບແລະເຂົ້າມີຄວາມສາມາດພິເສດໃນການສອນເລື່ອງພຣະເຢຊູເຈົ້າໃຫ້ກັບຜູ້ຄົນ.

- ອາໂປໂລເປັນຄົນທີ່ມີການສຶກສາດີໃນພຣະຄຳພີເຮັບເຣີແລະມີຂອງປະທານໃນເລື່ອງຂອງການເວົ້າ.
- ເຂົ້າໄດ້ຮັບການອົບຮົມຈາກຄຣິສະຕຽນສອງຄົນໃນເມືອງເອເຟໂຊ ຄື ອາຄີນລາແລະປິນສີລາ.
- ໂປໂລເນັ້ນວ່າທ່ານແລະອາໂປໂລ ເປັນເຊັ່ນດຽວກັນກັບຜູ້ປະກາດຂ່າວປະເສີດແລະຄຣູຄົນອື່ນໆ ເຊິ່ງກຳລັງທຳງານເພື່ອເປົ້າໝາຍດຽວກັນໃນການຊ່ວຍໃຫ້ຜູ້ຄົນເຊື່ອໃນພຣະເຢຊູເຈົ້າ.

## ອາໂມດ

### ຂໍ້ເທັດຈິງ

ອາໂມດເປັນຜູ້ປະກາດພຣະຄຳພີສະຣາເອນຄົນໜຶ່ງ ຊຶ່ງມີຊີວິດຢູ່ໃນສະໄໝຂອງ ອຸດຊີຢາ ກະສັດຢູດາ.

- ກ່ອນທີ່ທ່ານຈະຖືກເອີ້ນໃຫ້ເປັນຜູ້ປະກາດພຣະຄຳພີ,ອາໂມດເປັນຄົນລ້ຽງແກະແລະທຳສວນໝາກເດື່ອຢູ່ໃນອານາຈັກຢູດາ.
- ອາໂມດໄດ້ພະຍາກອນຕໍ່ຕ້ານອານາຈັກຝ່າຍເໜືອ ຄືອິສະຣາເອນກ່ຽວກັບເລື່ອງທີ່ພວກເຂົາບໍ່ມີຄວາມຍຸດຕິທຳຕໍ່ປະຊາຊົນ.

## ອາໂຣນ

### ຂໍ້ເທັດຈິງ

ອາໂຣນເປັນອ້າຍກົກຂອງໂມເຊ ເຊິ່ງພຣະເຈົ້າໄດ້ເລືອກອາໂຣນໃຫ້ເປັນມະຫາປະໂລຫິດຄົນທຳອິດຂອງຊົນຊາດອິສະຣາເອນ.

- ອາໂຣນໄດ້ຊ່ອຍໂມເຊເວົ້າກັບກະສັດຟາໂຣ ເພື່ອໃຫ້ປົດປ່ອຍຊົນຊາດອິສະຣາເອນໃຫ້ໄປເປັນອິດສະຫຼະ.
- ໃນຂະນະທີ່ຊົນຊາດອິສະຣາເອນກຳລັງເດີນທາງໃນເຂດທຸລະກັນດານນັ້ນ ອາໂຣນໄດ້ເຮັດຜິດບາບໂດຍການສ້າງຮູບເຄົາລົບໃຫ້ປະຊາຊົນກາບໄຫວ້ບູຊາ.
- ພຣະເຈົ້າໄດ້ແຕ່ງຕັ້ງໃຫ້ອາໂຣນ ແລະລູກຫລານຂອງເພິ່ນໃຫ້ເປັນມະຫາປະໂລຫິດສຳລັບຊົນຊາດອິສະຣາເອນ.

## ອາຄາເຊຍ ( ກະຖິນເທດ )

### ນິຍາມ

ຄຳວ່າ "ອາຄາເຊຍ" ເປັນຊື່ຂອງໄມ້ພຸ່ມຫລືຕົ້ນໄມ້ທີ່ຂຶ້ນໃນແຜ່ນດິນການາອານໃນສະໄໝບູຮານ;
ແຕ່ກໍຍັງມີຢູ່ຫລວງຫລາຍໃນພື້ນທີ່ນັ້ນໃນທຸກມື້ນີ.

- ໄມ້ສີສົ້ມປະສົມນ້ຳຕານຈາກຕົ້ນອາຄາເຊຍເປັນໄມ້ທີ່ແຂງແລະທົນທານ, ເປັນວັດຖຸທີ່ໃຊ້ປະໂຫຍດໃນການກໍ່ສ້າງສິ່ງຕ່າງໆ.
- ໄມ້ອາຄາເຊຍ ຫລືໄມ້ກະຖິນເທດນີ້ທົນຕໍ່ຄວາມຜຸພ ຸ ອຍ ເພາະວ່າເນື້ອໄມ້ມີຄວາມຫນາແໜ້ນສູງປ້ອງກັນການຊຶມຂອງນ້ຳ, ແລະມີນ້ຳຢາທຳມະຊາດທີ່ປ້ອງກັນບໍ່ໃຫ້ແມງມາເຈາະທຳລາຍ.
- ໃນພຣະຄຳພີ, ໄມ້ກະຖິນເທດຈະຖືກໃຊ້ໃນການສ້າງຫໍເຕັ້ນແລະຫີບພັນທະສັນຍາ.


generated on Thu Jul 10 08:45:04 2025

## ອາຍຸ, ຍຸກ

### ນິຍາມ

ຄຳວ່າ "ອາຍຸ" ເວົ້າເຖິງຈຳນວນປີທີ່ບຸກຄົນນຶ່ງໄດ້ມີຊີວິດຢູ່. ນອກນັ້ນຄຳນີ້ອາດຈະໃຊ້ໝາຍເຖິງຊ່ວງເວລາໃດຊ່ວງເວລານຶ່ງກໍໄດ້.

- ຄຳອື່ນໆທີ່ໃຊ້ສະແດງເຖິງຊ່ວງເວລາທີ່ຍາວອອກໄປລວມທັ້ງ "ສະໄໝ" ແລະ "ລະດູ."
- ພຣະເຢຊູຊົງອ້າງເຖິງ "ຍຸກນີ້" ວ່າເປັນຊ່ວງເວລາປັດຈຸບັນ ເມື່ອຄວາມຊົ່ວ, ຄວາມຍາກ, ແລະການບໍ່ເຊື່ອຟັງຈະເຕັມໄປທົ່ວແຜ່ນດິນໂລກ.
- ຈະມີຍຸກໜ້າເມື່ອຄົນຊອບທັມຈະຄອບຄອງເໜືອທ້ອງຟ້າໃໝ່ແລະແຜ່ນດິນໂລກໃໝ່.

### ຄຳແນະນຳໃນການແປ

- ຄຳວ່າ "ອາຍຸ" ອາດແປໄດ້ອີກວ່າ "ສະໄໝ" ຫລື "ຈຳນວນປີຂອງອາຍຸ" ຫລື "ຊ່ວງໄລຍະເວລາ" ຫລື "ເວລາ" ທັ້ງນີ້ຂຶ້ນຢູ່ກັບກໍລະນີ.
- ເມື່ອຫາທີ່ວ່າ "ເມື່ອມີອາຍຸຫລາຍແລ້ວ" ກໍອາດແປໄດ້ວ່າ "ເມື່ອມີອາຍຸຫລາຍຂຶ້ນ" ຫລື "ເມື່ອເຂົາເຖົ້າຫລາຍ" ຫລື "ເມື່ອເຂົາໄດ້ມີຊີວິດຢູ່ດົນ."
- ເມື່ອຫາທີ່ວ່າ "ໃນຍຸກທີ່ຊົ່ວຮ້າຍແຫ່ງປັດຈຸບັນ" ໝາຍຄວາມວ່າ "ໃນຊ່ວງເວລານີ້ ເມື່ອຜູ້ຄົນເຮັດຊົ່ວຊ້ຳຫລາຍ."

## ອາດາມ

### ຂໍ້ເທັດຈິງ

ອາດາມເປັນຄົນທຳອິດທີ່ພຣະເຈົ້າໄດ້ຊົງສ້າງ. ລາວແລະເອວາຜູ້ເປັນເມຍຖືກສ້າງຕາມພຣະລັກສະນະຂອງພຣະເຈົ້າ.

- ພຣະເຈົ້າຊົງສ້າງອາດາມຂຶ້ນມາຈາກດິນແລ້ວເປົ່າລົມຫາຍໃຈເຂົ້າໄປໃນລາວເພື່ອໃຫ້ມີຊີວິດ.
- ຊື່ອາດາມຄືກັບຄຳໃນພາສາເຮັບເຣີທີ່ແປວ່າ "ດິນແດງ" ຫລື "ພື້ນດິນ."
- ຄຳວ່າ "ອາດາມ" ເປັນຄຳດຽວກັບຄຳໃນພັນທະສັນຍາເດີມທີ່ໃຊ້ເອີ້ນ "ມະນຸດຊາດ" ຫລື "ມະນຸດ."
- ມະນຸດທຸກຄົນເປັນເຊື້ອສາຍຂອງອາດາມແລະເອວາ.
- ອາດາມແລະເອວາບໍ່ເຊື່ອຟັງພຣະເຈົ້າ. ສະນັ້ນພວກເຂົາຈຶ່ງໄດ້ຖືກແຍກຕົວອອກຈາກພຣະເຈົ້າ; ການບໍ່ເຊື່ອຟັງເຮັດໃຫ້ເກີດຄວາມຍາກ ແລະຄວາມຕາຍເຂົ້າມາໃນໂລກ.

(ເບິ່ງເພີ່ມເຕີມ: death, descendant, Eve, image of God, life)

## ອາບີອາທາ

### ຂໍ້ເທັດຈິງ

ໃນສະໄໝຂອງກະສັດດາວິດ ອາບີອາທາໄດ້ເປັນມະຫາປະໂລຫິດຂອງຊົນຊາດ ອິສະຣາເອນ.

- ເມື່ອກະສັດໂຊນຂ້າພວກປະໂລຫິດ, ອາບີອາທາໄດ້ຫລົບໜີໄປຫາດາວິດໃນຖິ່ນທຸລະກັນດານ.
- ອາບີອາທາແລະມະຫາປະໂລຫິດອີກຜູ້ນຶ່ງຊື່ຊາດົກໄດ້ຮັບໃຊ້ດາວິດຢ່າງສັດຊື່ຕະຫລອດຣາຊການຂອງດາວິດ.
- ຫລັງຈາກດາວິດສິ້ນພຣະຊົນ ອາບີອາທາໄດ້ພະຍາຍາມສນັບສນູນອາໂດນີຢາຂຶ້ນເປັນກະສັດແທນທີ່ຈະແມ່ນໂຊໂລໂມນ.
- ດ້ວຍເຫດນີ້ ກະສັດໂຊໂລໂມນຈຶ່ງໄດ້ປົດອາບີອາທາອອກຈາກການເປັນປະໂລຫິດ.

(ເບິ່ງເພີ່ມເຕີມ: Zadok · Saul (OT) · David · Solomon · Adonijah)

## ອາຫາສຸເອຣັດ

### ຂໍ້ເທັດຈິງ

ອາຫາສຸເອຣັດເປັນກະສັດຜູ້ປົກຄອງອານາຈັກເປີເຊຍບູຮານເປັນເວລາຊາວປີ.

- ນີ້ເປັນຊ່ວງເວລາທີ່ຄົນຢິວທີ່ຖືກເນລະເທດອອກໄປອາໃສຢູ່ໃນກຸງບາບີໂລນເນຍຊຶ່ງຢູ່ພາຍໃຕ້ການປົກຄອງຂອງຊາວເປີເຊຍ.
- ອີກນາມນຶ່ງຂອງກະສັດນີ້ແມ່ນ ເຊເຊັດ.


generated on Thu Jul 10 08:45:04 2025

- ຫລັງຈາກທີ່ໄດ້ຊົງໄລ່ພຣະຣາຊີນີຂອງເພິ່ນອອກຈາກຕຳແໜ່ງເພາະຄວາມໂກດຮ້າຍແລ້ວ, ຕໍ່ມາກະສັດອາຫາສຸເອຣັດໄດ້ເລືອກເອົາຍິງຊາວຢິວຊື່ ເອສະເທ ໃຫ້ເປັນມະເຫສີແລະພະຣາຊີນີໃໝ່ຂອງເພິ່ນ.

(ເບິ່ງເພີ່ມເຕີມ: Babylon, Esther, Ethiopia, exile, Persia)

## ອາອີ

### ຂ້ເທັດຈິງ

ອາອີເປັນເມືອງນຶ່ງຂອງຊາວການາອານໃນສະໄໝພຣະສັນຍາເດີມ ທີ່ຕັ້ງຫາງທິດໃຕ້ຂອງເມືອງເບັດເອນ ແລະຢູ່ຫ່າງຈາກເມືອງເຢຣີໂກໄປທາງຕາເວັນຕົກສ່ຽງເໜືອປະມານແປດກິໂລແມັດ.

- ຫລັງຈາກເອົາຊະນະເມືອງເຢຣີໂກແລ້ວ, ໂຢຊວຍໄດ້ນຳພວກອິສະຣາເອນບຸກໂຈມຕີເມືອງອາອີ ແຕ່ວ່າພວກເຂົາຕ້ອງເສຍຊັຍ ເພາະພຣະເຈົ້າບໍ່ຊົງພໍພຣະທັຍໃນພວກເຂົາ.
- ມີຄົນອິສະຣາເອນຄົນນຶ່ງຊື່ ອາການໄດ້ລັກຊັບສິນທີ່ຍຶດມາຈາກເມືອງເຢຣີໂກ ແລະພຣະເຈົ້າໄດ້ຊົງບັນຊາໃຫ້ຂ້າເຂົ້າທັ້ງຄອບຄົວແລ້ວພຣະເຈົ້າໄດ້ຊົງຊ່ວຍໃຫ້ພວກອິສະຣາເອນເອົາຊະນະຊາວເມືອງອາອີໄດ້.

(ເບິ່ງເພີ່ມເຕີມ: Bethel, Jericho)

## ອາຮາດ

### ຂ້ເທັດຈິງ

ອາຮາດເປັນກະສັດຜູ້ຊົ່ວຮ້າຍຜູ້ທີ່ປົກຄອງອານາຈັກຢູດາ ຈາກປີ 732 ກ.ຄ.ສ. ເຖິງ 716 ກ.ຄ.ສ. ຊຶ່ງເປັນເວລາ 140 ປີ ກ່ອນຫລາຍຄົນໃນ ອິສະຣາເອນແລະຢູດາຖືກຈັບເປັນຊະເລີຍທີ່ບາບີໂລນ.

- ໃນຂະນະທີ່ເພິ່ນໄດ້ປົກຄອງຢູດາ, ອາຮາດໄດ້ສ້າງແທ່ນບູຊາເພື່ອນະມັສການພວກພຣະປອມຂອງຊາວອັດຊີຣຽນ,ຊຶ່ງເຮັດໃຫ້ປະຊາຊົນໜີຈາກ ພຣະຢາເວ, ພຣະເຈົ້າອົງຫ່ຽງແທ້ອົງດຽວ.
- ກະສັດອາຮາດມີອາຍຸຊາວປີເມື່ອເພິ່ນໄດ້ເລີ່ມຂຶ້ນປົກຄອງຢູດາ, ແລະໄດ້ຄອງບັນລັງເປັນເວລາສິບຫົກປີ.

(ເບິ່ງເພີ່ມເຕີມ: Babylon)

## ອາຮາບ

### ຂ້ເທັດຈິງ

ອາຮາບເປັນກະສັດຜູ້ຊົ່ວຮ້າຍຜູ້ນຶ່ງປົກຄອງອານາຈັກເໜືອຂອງອິສະຣາເອນຈາກປີ 875 ກ.ຄ.ສ ຈົນເຖິງປີ 854 ກ.ຄສ.

- ກະສັດອາຮາບນຳພາໃຫ້ປະຊາຊົນອິສະຣາເອນໄປນະມັສການພຣະປອມທັ້ງຫລາຍ.
- ຜູ້ປະກາດພຣະທັມເອລີຢາໄດ້ຕໍ່ສູ້ກະສັດອາຮາບ ແລະບອກພຣະອົງວ່າຈະມີການອຶດອາຫານຢ່າງແຮງເປັນເວລາສາມປີເຄິ່ງ ເພື່ອເປັນການລົງໂທດຄວາມບາບທີ່ອາຮາບໄດ້ຊັກຊວນອິສະຣາເອນໃຫ້ເຮັດ.
- ອາຮາບແລະເຢເຊເບນເມຍຂອງເພິ່ນໄດ້ເຮັດສິ່ງທີ່ຊົ່ວຮ້າຍຫລາຍ, ຮວມເຖິງການໃຊ້ອຳນາດຂອງເພິ່ນໃນການຊົ່ວເຊັ່ນຂ້າປະຊາຊົນຜູ້ບໍຣິສຸດ.

(ເບິ່ງເພີ່ມເຕີມ: Baal, Elijah, Jezebel, kingdom of Israel, Yahweh)

## ອາໂດນີຢາ

### ຂ້ເທັດຈິງ

ອາໂດນີຢາເປັນລູກຜູ້ທີສີ່ຂອງກະສັດດາວິດ.

- ອາໂດນີຢາໄດ້ພະຍາຍາມທີ່ຈະຍຶດອຳນາດເພື່ອເປັນກະສັດຂອງອິສະຣາເອນຫລັງຈາກອ້າຍຄົນທີ່ຊື່ອັບຊາໂລມແລະຊື່ອຳໂນນໄດ້ເສັ້ຽຊີວິດແລ້ວ.
- ແຕ່ພຣະເຈົ້າໄດ້ຊົງສັນຍາທີ່ຈະມອບບັນລັງໃຫ້ໂຊໂລໂມນ,ລູກຂອງດາວິດ, ດັ່ງນັ້ນແຜນຂອງອາໂດນີຢາຈຶ່ງຫລົ້ມເຫລວ ແລະໂຊໂລໂມນກໍໄດ້ຂຶ້ນຄອງບັນລັງ.


generated on Thu Jul 10 08:45:04 2025

- ເມື່ອອາໂດນີຢາໄດ້ພະຍາຍາມຄັ້ງທີສອງ, ໂຊໂລໂມນຈຶ່ງສັ່ງປະຫານຊີວິດລາວເສຍ.

)

(ເບິ່ງເພີ່ມເຕີມ: David, Solomon)

## ອໍາໂນນ

### ຂ້ເທັດຈິງ

ອໍາໂນນ ເປັນໂອລົດບຸດໃຫຍ່ຂອງກະສັດດາວິດກັບອາຮີໂນອໍາ ມະເຫສີຂອງເພິ່ນ.

- ອໍາໂນນໄດ້ຂົ່ມຂືນ ຕາມາ ນ້ອງສາວຕ່າງມານດາຂອງເຂົາ ຊຶ່ງເປັນນ້ອງສາວຂອງອັບຊາໂລມ.
- ເພາະເຫດນີ ອັບຊາໂລມຈຶ່ງໄດ້ວາງແຜນຮ້າຍຕໍ່ອໍາໂນນແລະໄດ້ຂ້າອໍາໂນນເສຍ.

## ອໍາໂມນ, ຄົນອໍາໂມນ, ຍິງອໍາໂມນ

### ຂ້ເທັດຈິງ

ຄໍາວ່າ "ປະຊາຊົນອໍາໂມນ" ຫຼື "ຄົນອໍາໂມນ" ຄືກຸ່ມຄົນໃນແຜ່ນດິນ ການາອານ ພວກເຂົາສືບເຊື້ອສາຍມາຈາກເບັນ-ອໍາມີ ຜູ້ຊຶ່ງເປັນບຸດຊາຍຂອງ ໂລດ ທີ່ເກີດຈາກລູກສາວຄົນນ້ອຍຂອງ ໂລດ.

- ຄໍາວ່າ "ຍິງອໍາໂມນ" ກ່າວເຖິງຜູ້ຍິງອໍາໂມນໂດຍສະເພາະ ຄໍານີ້ສາມາດແປໄດ້ອີກວ່າ "ຜູ້ຍິງຊາວອໍາໂມນ."
- ຄົນອໍາໂມນອາໃສຢູ່ຝັ່ງຕາເວັນອອກຂອງແມ່ນ້ໍາຈໍແດນແລະເປັນສັດຕູຂອງຄົນອິສະຣາເອນ.
- ມີຄັ້ງໜຶ່ງ ຄົນອໍາໂມນໄດ້ຈ້າງຜູ້ປະກາດພຣະຄໍາຄົນໜຶ່ງຊື່ວ່າ ບາລາອາມ ເພື່ອໃຫ້ໄປສາບແຊ່ງອິສະຣາເອນ ແຕ່ພຣະເຈົ້າບໍ່ຊົງອະນຸຍາດ.

## ອິດຊະມາເອນ

### ຂ້ເທັດຈິງ

ອິດຊະມາເອນເປັນລູກຊາຍຂອງອັບລາຮາມແລະຄົນຮັບໃຊ້ຂອງຊາຣາຄືຮາກາ ມີຜູ້ຊາຍຫລາຍຄົນໃນພັນທະສັນຍາເດີມທີ່ມີຊື່ວ່າອິດຊະມາເອນ.

- ຄໍາວ່າ "ອິດຊະມາເອນ " ຫມາຍເຖິງ "ພຣະເຈົ້າຊົງໄດ້ຍິນ "
- ພຣະເຈົ້າຊົງສັນຍາ ວ່າ ຈະອວຍພອນລູກຊາຍຂອງອັບລາຮາມ ຄື ອິດຊະມາເອນ ແຕ່ເຂົາບໍ່ແມ່ນລູກຊາຍທີ່ພຣະເຈົ້າໄດ້ຊົງສັນຍາວ່າຈະເຮັດພັນທະສັນຍາດ້ວຍ.
- ພຣະເຈົ້າຊົງປົກປ້ອງຮາກາ ແລະ ອິດຊະມາເອນເມື່ອເຂົາຖືກສົ່ງອອກໄປໃນທະເລຊາຍ.
- ອິດຊະມາເອນລູກຊາຍຂອງເມຫາລີຢາເປັນເຈົ້າຫນ້າທີ່ກອງທັບຈາກຢູດາ ຜູ້ທີ່ໄດ້ນໍາກຸ່ມຜູ້ຊາຍໄປຂ້າຜູ້ວ່າລາດຊະການຜູ້ທີ່ຖືກແຕ່ງຕັ້ງໂດຍກະສັດເນບູກາເນັດຊາ.
- ມີຜູ້ຊາຍອີກສີ່ຄົນທີ່ມີຊື່ວ່າອິດຊະມາເອນໃນພັນທະສັນຍາເດີມ

## ອິດສາ, ໂລບ

### ນິຍາມ

ຄໍາວ່າ "ອິດສາ" ເວົ້າເຖິງຄວາມອິດສາບາງຄົນເພາະຄົນນັ້ນມີຊັບສິນ ຫລືຄົນນັ້ນມີຄຸນນະສົມບັດທີ່ໜ້າຊົມເຊີຍ. ຄໍາວ່າ "ໂລບ" ໝາຍເຖິງການອິດສາບາງຄົນທີ່ນໍາໄປສູ່ຄວາມຢາກໄດ້ຢ່າງຮຸນແຮງ ທີ່ຢາກໄດ້ຂອງຄົນອື່ນມາເປັນຂອງຕົນເອງ.

- ຄວາມອິດສາມັກຈະເປັນຄວາມຮູ້ສຶກທາງລົບຂອງຄວາມບໍ່ພໍໃຈຍ້ອນວ່າຄວາມສໍາເລັດ, ໂຊກດີ, ໃນຊັບສິນຂອງຄົນອື່ນ.
- ຄວາມໂລບແມ່ນຄວາມປາຖະໜາຢ່າງແຮງກ້າທີ່ຈະເອົາຊັບສິນຂອງຄົນອື່ນ, ຫລືແມ່ນແຕ່ຄູ່ແຕ່ງງານ, ຂອງຄົນອື່ນ.


generated on Thu Jul 10 08:45:04 2025

## ອິດຊາຄາ

### ຂໍ້ເທັດຈິງ

ອິດຊາຄາເປັນລູກຊາຍຄົນທີຫ້າຂອງຢາໂຄບ ແມ່ຂອງເຂົາຄື ເລອາ.

- ເຜົາອິດຊາຄາເປັນນຶງໃນສິບສອງເຜົາຂອງອິດສະຣາເອນ.
- ແຜ່ນດິນຂອງອິດຊາຄາຖືກລ້ອມຮອບດ້ວຍເນັບທາລີ,ເຊບູໂລນ,ມານາເຊ,ແລະກາດ.
- ແຜ່ນດິນນີຕັ້ງຢູ່ທາງທິດໃຕ້ຂອງທະເລກາລີເລ.

## ອິດສະຣາເອນ,ຄົນອິດສະຣາເອນ,ຊົນຊາດອິດສາຣະເອນ

### ນິຍາມ

ຄໍາວ່າ "ອິດສະຣາເອນ " ເປັນຊືທີພຣະເຈົ້າປະທານໃຫ້ແກ່ຢາໂຄບ. ອິດສະຣາເອນຫມາຍຄວາມວ່າ "ເຂົາປ້ໍາສູ້ກັບພຣະເຈົ້າ "

- ເຊືອສາຍຂອງຢາໂຄບກາຍເປັນຜູ້ຮູ້ຈັກໃນວ່າ "ປະຊາຊົນອິດສະຣາເອນ"

"ຊົນຊາດອິດສະຣາເອນ " ຫລື "ຄົນອິດສະຣາເອນ "

- ພຣະເຈົ້າຊົງເຮັດພັນທະສັນຍາກັບປະຊາຊົນອິດສະຣາເອນ ພວກເຂົາເປັນປະຊາຊົນທີພຣະອົງຊົງເລືອກ.
- ປະເທດອິດສະຣາເອນປະກອບດ້ວຍສິບສອງເຜົາ.
- ຫລັງຈາກກະສັດໂຊໂລໂມນສິ້ນພະຊົນບໍ່ດົນ ອິດສະຣາເອນຖືກແບ່ງເປັນສອງອານາຈັກ ຄື ອານາຈັກທາງພາກໃຕ້ ເອີນວ່າ "ຢູດາ " ແລະ ອານາຈັກທາງພາກເຫນືອ ເອີນວ່າ "ອິດສະຣາເອນ "
- ຫລາຍເທືອ ຄໍາວ່າ "ອິດສະຣາເອນ " ສາມາດແປວ່າ "ປະຊາຊົນອິດສະຣາເອນ " ຫລື "ຊົນຊາດອິດສະຣາເອນ " ຂຶນຢູ່ກັບກໍລະນີ.

## ອິສຣະ, ອິສຣະພາບ, ເສຣີພາບ

### ນິຍາມ

ຄໍາວ່າ "ອິສຣະ" ຫຼື "ອິສຣະພາບ" ກ່າວເຖິງການບໍ່ໄດ້ເປັນທາດ,ຫຼືຫຍັງກໍຕາມທີມີການຜູກມັດ, ອີກຄໍານຶງສໍາລັບ "ອິດສຣະພາບ" ຄື "ເສຣີພາບ".

- ການສະແດງອອກ "ທໍາໃຫ້ຄົນນຶງເປັນອິສຣະ" ຫຼື "ປ່ອຍບາງຄົນໃຫ້ມີອິສຣະ", ໝາຍຄວາມວ່າທໍາໃຫ້ບາງຄົນບໍ່ເປັນທາດ ຫຼືຖືກຈັບອີກຕໍ່ໄປ.
- ໃນພຣະຄັມພີ
  ຄໍາເຫຼົ່ານີມີຫຼາຍຄັ້ງທີໃຊ້ໃນທາງປຽບທຽບເພືອກ່າວເຖິງຜູ້ສັດທາໃນພຣະເຢຊູຈະບໍ່ຢູ່ໃຕ້ອໍານາດຂອງຄວາມບາບອີກຕໍ່ໄປ.
- ມີ "ເສຣີພາບ" ຫຼື "ອິສຣະພາບ" ສາມາດກ່າວເຖິງການທີບໍ່ຕ້ອງທໍາຕາມກົດໝາຍຂອງໂມເຊ, ແຕ່ແທນດ້ວຍການມີອິສຣະພາບທີຈະດໍາເນີນຊີວິດໂດຍການສອນແລະການຊົງນໍາຂອງພຣະວິນຍານບໍຣິສຸດ.

### ຄໍາແນະນໍາໃນການແປ

- ຄໍາວ່າ "ອິສຣະ" ສາມາດແປດ້ວຍຄໍາ ຫຼືປະໂຫຍກທີມີຄວາມໝາຍວ່າ "ບໍ່ຜູກມັດ" ຫຼື "ບໍ່ຖືກທໍາໃຫ້ເປັນທາດ" ຫຼື "ບໍ່ແມ່ນທາດ" ຫຼື "ບໍ່ຖືກຜູກມັດ".
- ຄໍາວ່າ "ອິສຣະພາບ" ຫຼື "ເສຣີພາບ" ສາມາດແປດ້ວຍຄໍາຫຼືຄໍາເວົ້າທີມີຄວາມໝາຍວ່າ "ສະຖານະພາບຂອງການມີອິສຣະພາບ" ຫຼື "ເງືອນໄຂທີບໍ່ຕ້ອງເປັນທາດ" ຫຼື "ບໍ່ຖືກຜູກມັດ".
- ການສະແດງອອກຂອງຄໍາວ່າ "ຖືກປົດປ່ອຍ" ສາມາດແປໄດ້ອີກວ່າ "ທໍາໃຫ້ເປັນອິສຣະ" ຫຼື "ຖືກຊ່ວຍໃຫ້ອອກຈາກການເປັນທາດ" ຫຼື "ຖືກປົດປ່ອຍຈາກການຜູກມັດ".
- ຄົນທີຖືກ "ປົດປ່ອຍໃຫ້ເປັນອິສຣະ" ໄດ້ຖືກ "ປົດປ່ອຍ" ຫຼື "ຖືກພາອອກມາ" ຈາກການຜູກມັດຫຼືການເປັນທາດ.


generated on Thu Jul 10 08:45:04 2025

## ອີຊາກ

### ຂໍ້ເທັດຈິງ

ອີຊາກເປັນລູກຊາຍຄົນດຽວຂອງອັບລາຮາມແລະຊາຣາ.ພຣະເຈົ້າໄດ້ຊົງສັນຍາວ່າຈະປະທານບຸດຊາຍໃຫ້ແກ່ພວກເຂົາເຖິງແມ່ນວ່າພວກເຂົາຈະເຖົ້າແກ່ແລ້ວ.

- ຊື່ "ອີຊາກ " ຫມາຍຄວາມວ່າ "ເຂົາຫົວຂວັນ " ເມື່ອພຣະເຈົ້າກ່າວກັບອັບລາຮາມວ່າເຂົາແລະຊາລາຈະມີບຸດຊາຍ,
  ອັບລາຮາມໄດ້ຫົວຂວັນ ເພາະເຂົາທັງສອງເຖົ້າແກ່ຫລາຍແລ້ວ. ຕໍ່ມາພາຍຫລັງ,ຊາຣາກໍໄດ້ຫົວຂວັນ
  ເຫມືອນກັນເມື່ອເຂົາໄດ້ຮູ້ຈັກຂ່າວນີ.
- ແຕ່ພຣະເຈົ້າຊົງເຮັດໃຫ້ຄໍາສັນຍາຂອງພຣະອົງສໍາເລັດແລະອີຊາກກໍໄດ້ເກີດໃຫ້ອັບລາຮາມແລະຊາຣາໃນຊ້ວງພວກເຂົາຍັງເຖົ້າແກ່.
- ພຣະເຈົ້າໄດ້ຊົງບອກອັບລາຮາມວ່າພັນທະສັນຍາທີ່ພຣະອົງໄດ້ເຮັດກັບອັບລາຮາມຈະເປັນຂອງອີຊາກແລະຜູ້ສືບເຊື້ອສາຍຂອງເຂົາຕລອດກາລ.
- ເມື່ອອີຊາກເປັນຫນຸ່ມ,ພຣະເຈົ້າຊົງທົດສອບຄວາມເຊື່ອຂອງອັບລາຮາມໂດຍສັ່ງເຂົາໃຫ້ຖວາຍບູຊາອີຊາກ.
- ລູກຂອງອີຊາກຄືຢາໂຄບຜູ້ຊຶ່ງມີລູກຊາຍສິບສອງຄົນ
  ພາຍຫລັງເຊື້ອສາຍຂອງພວກເຂົາໄດ້ກາຍມາເປັນສິບສອງເຜົ່າຂອງຊົນຊາດອິສລະເອນ.

## ອີໂກນິອົມ

### ຂໍ້ເທັດຈິງ

ອີໂກນິອົມເປັນເມືອງໃນທາງໃຕ້ຂອງພາກກາງຊຶ່ງປັດຈຸບັນນີ້ຄືປະເທດຕຸຣະກີ

- ໃນການເດີນທາງເປັນມິດເຊັ່ນນາລີຄ້ັງທໍາອິດຂອງອາຈານໂປໂລ ເພິນແລະບາ
  ຣະນາບາໄດ້ເດີນທາງໄປຍັງເມືອງອີໂກນິອົມຫລັງຈາກທີ່ພວກຍິວໄດ້ບັງຄັບໃຫ້ພວກເຂົາອອກຈາກເມືອງອັນຕີໂອເຂຍ
- ແລ້ວຄົນຍິວແລະຄົນຕ່າງຊາດທີ່ບໍ່ເຊື່ອໃນເມືອງອີໂກນິອົມພວກເຂົາວາງແຜນທີ່ຈະເອົາກ້ອນຫີນຄ່ວາງໃ
  ສ່ໂປໂລແລະເພື່ອນຮ່ວມງານຂອງເຂົາ ແຕ່ພວກເຂົາໄດ້ຫລົບໜີໄປຍັງເມືອງໃກ້ຄຽງທີ່ຊື່ລິສະຕຣາ
- ຫລັງຈາກນັ້ນຜູ້ຄົນຈາກເມືອງອັນຕີໂອເຂຍໄດ້ມາຍັງເມືອງລິສະຕຣາແລະຍົວະໃຫ້ຜູ້ຄົນທີ່ນັ້ນເອົາກ້ອນຫີນຄ່ວາງໃສ່ໂປໂລ

## ອຸດຊິຢາ, ອາຊາຣິຢາ

### ຂໍ້ເທັດຈິງ

ອຸດຊິຢາໄດ້ກາຍເປັນກະສັດຢູດາຕອນທ່ານອາຍຸ 16 ປີແລະຄອງລາດຢູ່ 52 ປີ, ຊຶ່ງເປັນຣາດຊະການທີ່ຍາວນານທີ່ສຸດ.
ອຸດຊິຢາຍັງເປັນທີ່ຮູ້ຈັກໃນຊື່ "ອາຊາຣິຢາ."

- ກະສັດອຸດຊິຢາເປັນທີ່ຮູ້ຈັກໃນເລື່ອງທະຫານທີ່ມີການຈັດການແລະຊ່ຽວຊານໃນການສູ້ຮົບ.
  ທ່ານມີຫໍຄອຍທີ່ສ້າງຂຶ້ນເພື່ອປົກປ້ອງເມືອງແລະມີອາວຸດສົງຄາມທີ່ອອກແບບມາເປັນພິເສດເພື່ອໃຊ້ຂຶ້ນຂີ່ພວກມັນເພື່ອຍິງລູກສອນແລະໂຍນກ້ອນຫີນຂະຫ
- ຕາບເທົ່າທີ່ອຸດຊິຢາປົ່ນນິບັດຮັບໃຊ້ພຣະເຈົ້າ, ເຂົາກໍ່ຊົງຈະເລີນຂຶ້ນ. ໃນຊ່ວງໃກ້ຈະສິ້ນຣາດຊະການຂອງເຂົາ, ຢ່າງໃດກໍຕາມ,
  ອຸດຊິຢາກັບອວດດີຈອງຫອງແລະບໍ່ເຊື່ອຟັງພຣະເຈົ້າດ້ວຍການເຜົາເຄື່ອງຫອມໃນພຣະວິຫານ,
  ຊຶ່ງມີພຽງປະໂຣຫິດເທົ່ານັ້ນທີ່ໄດ້ຮັບອະນຸຍາດກະທໍາໄດ້.
- ເພາະຄວາມຍາບນີ້ອຸດຊິຢາໄດ້ປ່ວຍເປັນພະຍາດຂີ້ທູດແລະຕ້ອງມີຊີວິດທີ່ແຍກຕົວອອກຈາກຄົນອື່ນຕະຫລອດສິ້ນຣາດຊະການຂອງເຂົາ.

## ອຸປະສັກ,ກ້ອນຫີນທີ່ເຮັດໃຫ້ສະດຸດ

### ນິຍາມ

ຄໍາວ່າ“ ອຸປະສັກ” ຫລື“ ກ້ອນຫີນທີ່ເຮັດໃຫ້ສະດຸດ” ໝາຍເຖິງວັດຖຸຫາງຮ່າງກາຍທີ່ເຮັດໃຫ້ຄົນເດີນທາງແລ້ວສະດຸດແລະລົ້ມ.

- ໃນພຣະຄໍາພີໃໝ່,
  ຄໍານີ້ຖ້າແປຕາມຕົວອັກສອນແມ່ນເວົ້າເຖິງໄມ້ເທົ້າຫຼືວັດຖຸອື່ນໆທີ່ເຮັດເປັນກັບດັກຫລືແຮ້ວທີ່ຈະລໍ້ອກໃສ່ສັດເຮັດໃຫ້ມັນຄາຢູ່ຫ້ັນແລ້ວບໍ່ສາມາດໄປໃສ່ໄດ້.
- ສິ່ງທີ່ເຮັດໃຫ້ສະດຸດລົ້ມແມ່ນສິ່ງໃດສິ່ງໜຶ່ງທີ່ເຮັດໃຫ້ຄົນເຮົາຂາດສະຕິທາງສິນທໍາ ຫລື ທາງຈິດວິນຍານ.
- ໃນຕົວຢ່າງເຊັ່ນດຽວກັນ, "ອຸປະສັກ" ຫລື "ກ້ອນຫີນທີ່ເຮັດໃຫ້ສະດຸດ"
  ສາມາດເປັນສິ່ງກີດຂວາງໃນຄົນມີຄວາມເຊື່ອໃນພຣະເຢຊູຄຣິດ ຫລືເຮັດໃຫ້ບາງຄົນບໍ່ເຕີບໂຕໃນຝ່າຍຈິດວິນຍານ.
- ປົກກະຕິແລ້ວຄວາມຍາບແມ່ນຄ້າຍຄືກັບສິ່ງທີ່ກີດຂວາງແກ່ຕົວເອງຫລືຕໍ່ຄົນອື່ນ.
- ບາງຄ້ັງພຣະເຈົ້າໄດ້ວາງກ້ອນຫີນທີ່ເຮັດສະດຸດລົ້ມໄວ້ໃນທາງຂອງຄົນທີ່ກະບົດຕໍ່ພຣະອົງ.


generated on Thu Jul 10 08:45:04 2025

### ຄຳແນະນຳໃນການແປ

- ຖ້າພາສາມີຄຳສັບສຳລັບວັດຖຸທີ່ພາໃຫ້ເກີດກັບດັກ, ຄຳນັ້ນສາມາດນຳມາໃຊ້ເພື່ອແປຄຳສັບນີ.
- ຄຳສັບນີ້ຍັງສາມາດແປວ່າ "ກ້ອນຫີນທີ່ກໍ່ໃຫ້ເກີດການສະດຸດລົ້ມ" ຫລື "ສິ່ງທີ່ເຮັດໃຫ້ຜູ້ໃດຜູ້ໜຶ່ງບໍ່ເຊື່ອ" ຫຼື "ອຸປະສັກທີ່ເຮັດໃຫ້ເກີດຄວາມສັບສົນ" ຫລື "ອຸປະສັກຕໍ່ຄວາມເຊື່ອ" ຫຼື "ສິ່ງທີ່ເຮັດໃຫ້ຜູ້ໃດຜູ້ໜຶ່ງເຮັດບາບ".

## ອູຣີຢາ

### ຂໍ້ເທັດຈິງ

ອູຣີຢາເປັນຄົນຊອບທຳແລະເປັນໜຶ່ງໃນທະຫານທີ່ດີທີ່ສຸດຂອງກະສັດດາວິດ. ທ່ານໄດ້ຮັບອ້າງອີງສະເໝີວ່າເປັນ "ອູຣີຢາຊາວຮິດຕີ."

- ອູຣີຢາມີພັນລະຍາທີ່ງາມຫລາຍຊື່ບັດເຊບາ.
- ດາວິດຊຶ່ງປະພຶດລ່ວງປະເວນີກັບພັນລະຍາຂອງອູຣີຢາ, ແລະນາງຕັ້ງໄດ້ທ້ອງມີລູກກັບດາວິດ.
- ເພື່ອປົກປິດບາບນີ້, ດາວິດເຮັດໃຫ້ອູຣີຢາຖືກຂ້າຕາຍໃນສົງຄາມ. ແລ້ວດາວິດຈຶ່ງແຕ່ງງານກັບບັດເຊບາ.
- ຊາຍອີກຄົນໜຶ່ງຊື່ວ່າອູຣີຢາ ເປັນປະໂຣຫິດໃນຊ່ວງສະໄໝກະສັດອາຮາບ.

## ອົງບໍລິສຸດ

### ນິຍາມ

ຄຳວ່າ "ອົງບໍລິສຸດ" ເປັນຕຳແໜ່ງໃນພຣະຄຳພີທີ່ເກືອບຈະອ້າງເຖິງພຣະເຈົ້າສະເໝີ.

- ໃນພັນທະສັນຍາເດີມ, ຕຳແໜ່ງນີ້ມັກຈະປາກົດໃນວະລີ "ອົງບໍລິສຸດຂອງອິດສະຣາເອນ."
- ໃນພັນທະສັນຍາໃໝ່, ພຣະເຢຊູໄດ້ຮັບການອ້າງເຖິງວ່າເປັນ "ອົງບໍລິສຸດ." ເຊັ່ນກັນ
- ຄຳວ່າ "ອົງບໍລິສຸດ" ບາງເທື່ອໃຊ້ໃນພຣະຄຳພີເພື່ອອ້າງເຖິງທູດສະຫວັນ.

### ຄຳແນະນຳໃນການແປ

- ຄຳແປກົງຕາມຕົວຄື, "ຜູ້ບໍລິສຸດ"

## ອົງຜູ້ສູງສຸດ

### ນິຍາມ

ຄຳວ່າ"ອົງຜູ້ສູງສຸດ"ເປັນຕຳແໜ່ງຂອງອົງພຣະຜູ້ເປັນເຈົ້າ ທີ່ອ້າງເຖິງຄວາມຍິ່ງໃຫຍ່ແລະອຳນາດຂອງພຣະອົງ.

- ຄວາມໝາຍຂອງຄຳນີ້ມີຄວາມໝາຍວ່າ "ມີອຳນາດຄອບຄອງສູງສຸດ" ຫຼື "ສູງສຸດ."
- ຄຳວ່າ "ສູງ" ໃນທີ່ນີ້ບໍ່ໄດ້ອ້າງເຖິງຄວາມສູງທາງກາຍຍະພາບຫຼືລະຍະທາງທີ່ອ້າງເຖິງຄວາມຍິ່ງໃຫຍ່.

### ຄຳແນະນຳໃນການແປ

- ຄຳນີ້ສາມາດແປວ່າ "ພຣະເຈົ້າຜູ້ສູງສຸດ" ຫຼື "ພຣະອົງຜູ້ສູງສຸດ" ຫຼື "ພຣະເຈົ້າອົງຜູ້ສູງສຸດ" ຫຼື "ພຣະເຈົ້າຜູ້ຍິ່ງໃຫຍ່ເໜືອທຸກສິ່ງ"
- ຫາກມີຄຳວ່າ "ສູງ" ປະກົດຢູ່ ໃຫ້ແນ່ໃຈວ່າບໍ່ໄດ້ອ້າງເຖິງຄວາມສູງທາງກາຍຍະພາບຫຼືລະຍະທາງ.

## ອົງພຣະຜູ້ເປັນເຈົ້າພຣະຢາເວ, ພຣະຢາເວພຣະເຈົ້າ

### ນິຍາມ

ໃນພັນທະສັນຍາເດີມ " ອົງພຣະຜູ້ເປັນເຈົ້າພຣະຢາເວ " ຖືກໃຊ້ຫຼາຍຄັ້ງເພື່ອອ້າງເຖິງພຣະເຈົ້າຜູ້ທ່ຽງແທ້ອົງດຽວ

- ຄຳວ່າ " ອົງພຣະຜູເປັນເຈົ້າ " ເປັນຕຳແໜ່ງຂອງພຣະເຈົ້າ ແລະ " ພຣະຢາເວ " ເປັນພຣະນາມສ່ວນຕົວ
- ພຣະຢາເວ " ມັກຈະລວມກັບຄຳວ່າ " ພຣະເຈົ້າ " ເພື່ອເປັນ " ພຣະຢາເວພຣະເຈົ້າ "


generated on Thu Jul 10 08:45:04 2025

### ຄຳແນະນຳໃນການແປ

- ໃນບາງຮູບແບບ " ພຣະຢາເວ " ຖືກໃຊ້ສຳລັບການແປພຣະນາມສ່ວນຕົວພຣະອົງຂອງພຣະເຈົ້າ ຄຳວ່າ " ອົງພຣະຜູ້ເປັນເຈົ້າພຣະຢາເວ " ແລະ " ພຣະຢາເວພຣະເຈົ້າ" ສາມາດແປຕາມອັກສອນ ແລະ ໃຫ້ພິຈາລະນາວ່າຈະແປຄຳເຫລົ່ານັ້ນແບບໃດ ຄື " ອົງພຣະຜູ້ເປັນເຈົ້າ " ໃນສະພາບການອື່ນ ເມື່ອອ້າງເຖິງພຣະເຈົ້າ
- ບາງພາສາໃສ່ຕຳແໜ່ງຫລັງຈາກພຣະນາມ ແລະ ຈະແປວ່າ " ພຣະຢາເວອົງພຣະຜູ້ເປັນເຈົ້າ " ໃຫ້ພິຈາລະນາວ່າແບບໃດທີ່ເປັນທຳມະຊາດສຳລັບພາສາໃນໂຄງການຄວນມີຕຳແໜ່ງ " ອົງພຣະຜູ້ເປັນເຈົ້າ " ຈະກ່ອນຫຼືຫລັງ " ພຣະຢາເວ "
- " ພຣະຢາເວພຣະເຈົ້າ " ສາມາດຂອກຄຳວ່າ ພຣະເຈົ້າຜູ້ຊົງໄດ້ຮັບການເອີ້ນວ່າ" ພຣະຢາເວ " ຫຼື " ພຣະເຈົ້າຜູ້ຊົງເປັນຜູ້ດຽວທີ່ຊົງພຣະຊົນຢູ່ " ຫຼື ເຮົາເປັນຄືຜູ້ທີ່ເປັນ " ພຣະເຈົ້າ "
- ຖ້າການແປຂອກຄຳວ່າ" ພຣະຢາເວ " ເປັນ " ອົງພຣະຜູ້ເປັນເຈົ້າ " ຫຼື " ອົງພຣະເຈົ້າ " ຄຳວ່າ" ອົງພຣະຜູ້ເປັນເຈົ້າພຣະຢາເວ " ສາມາດແປວ່າ " ອົງພຣະເຈົ້າຜູ້ເປັນພຣະເຈົ້າ " ຫຼື " ພຣະເຈົ້າຜູ້ຊົງເປັນອົງພຣະຜູ້ເປັນເຈົ້າ " ການແປແບບອື່ນສາມາດແປວ່າ" ອົງພຣະເຈົ້າຜູ້ຊົງເປັນເຈົ້ານາຍ " ຫຼື " ພຣະເຈົ້າຜູ້ຊົງເປັນອົງພຣະຜູ້ເປັນເຈົ້າ "
- ຄຳວ່າ " ອົງພຣະຜູ້ເປັນເຈົ້າພຣະຢາເວ " ບໍ່ສົມຄວນອອກຄຳວ່າເປັນ " ອົງພຣະເຈົ້າອົງພຣະຜູ້ເປັນເຈົ້າ " ເພາະຜູ້ອ່ານຈະບໍ່ໄດ້ສັງເກດເບິ່ງຄວາມແຕກຕ່າງຂອງຕົວອັກສອນຕາມທີ່ໄດ້ໃຊ້ກັນນີເພື່ອຈຳແນກຄວາມຕ່າງ

## ອົດທົນ, ຄວາມອົດທົນ

### ນິຍາມ

ຄຳວ່າ "ອົດທົນ" ຫຼື "ຄວາມອົດທົນ" ອ້າງເຖິງການຍາກບັນພະຍາຍາມຜ່ານສະຖານະການທີ່ຍາກລຳບາກ.
ຫຼາຍເທື່ອນັ້ນຄວາມອົດທົນກ່ຽວຂ້ອງການຄອຍຖ້າຢູ່ດ້ວຍ.

- ເມື່ອປະຊາຊົນອົດທົນກັບ ບາງໝາຍຄວາມວ່າພວກທ່ານຮັກບຸກຄົນແລະຍົກໂທດໃຫ້ ບໍ່ວ່າບຸກຄົນນັ້ນຈະມີຄວາມຜິດຢ່າງໃດ.
- ພຣະຄັມພີ ປະຊາກອນຂອງພຣະເຈົ້າໃຫ້ມີຄວາມອົດທົນເມື່ອຜະເຊີນກັບຄວາມຍາກລຳບາກແລະອົດທົນຕໍ່ກັນແລະກັນ.
- ເນື່ອງດ້ວຍພຣະເມດຕາຂອງພຣະອົງ, ພຣະເຈົ້າຊົງອົດທົນຕໍ່ຄົນທັ້ງຫຼາຍ,
ເຖິງແມ່ນວ່າຄົນເຫຼົ່ານີ້ຈະເປັນຄົນບາບຊຶ່ງສົມຄວນໄດ້ຮັບໂທດ.

## ອົດທົນ, ທົນ, ຄວາມອົດທົນ

### ນິຍາມ

ຄຳວ່າ "ອົດທົນ" ໝາຍເຖິງການໃຊ້ເວລາຍາວນານຫລືແບກພາລະສິ່ງທີ່ຍາກລຳບາກດ້ວຍຄວາມອົດທົນ.

- ນອກຈາກນີ້ຍັງໝາຍເຖິງການຍຶດໝັ້ນເມື່ອເວລາຂອງການທົດລອງມາເຖິງໂດຍບໍ່ລົ້ມເລີກ.
- ຄຳວ່າ "ການອົດທົນ" ອາດຈະໝາຍເຖິງ "ຄວາມອົດທົນ," "ໃນການແບກພາລະພາຍໃຕ້ຖືກການທົດລອງ," ຫລື "ບໍ່ທໍ້ຖອຍເມື່ອຖືກຂົ່ມເຫງ."
- ການໃຫ້ກຳລັງໃຈແກ່ບັນດາຄຣິສຕຽນເພື່ອໃຫ້ "ອົດທົນຈົນເຖິງທີ່ສຸດ" ຄືການບອກໃຫ້ເຂົາເຈົ້າເຊື່ອຟັງພຣະເຢຊູ, ເຖິງແມ່ນຈະເປັນເຫດໃຫ້ເຂົາເຈົ້າມີຄວາມທຸກຍາກລຳບາກກໍຕາມ.
- "ທົນທຸກທໍລະມານ" ຍັງໝາຍເຖິງ "ພົບກັບຄວາມທຸກຍາກ."

### ຄຳແນະນຳໃນການແປ

- ວິທີການແປຄຳວ່າ "ອົດທົນ" ອາດຈະລວມເຖິງ, "ອົດກັ້ນ" ຫລື "ຮັກສາຄວາມເຊື່ອ" ຫລື "ເຮັດສິ່ງທີ່ພຣະເຈົ້າຕ້ອງການໃຫ້ເຈົ້າເຮັດຕໍ່ໄປ" ຫລື "ຍຶດໝັ້ນ."
- ໃນບາງກໍລະນີ, "ອົດທົນ" ອາດຈະແປວ່າ, "ປະສົບການ" ຫລື "ຜ່ານໄປ."
- ດ້ວຍຄວາມໝາຍທີ່ໃຊ້ກັນມາເປັນເວລາດົນນານ, ຄຳວ່າ "ອົດທົນ" ອາດຈະແປເປັນ "ທົນທານ" ຫລື "ເຮັດຕໍ່ໄປ" ຄຳເວົ້າທີ່ວ່າ, "ຈະບໍ່ອົດທົນ" ສາມາດແປໄດ້ວ່າ, "ຈະບໍ່ທົນທານ" ຫລື "ຈະບໍ່ເຮັດອີກ."
- ວິທີການແປຄຳວ່າ "ຄວາມອົດທົນ" ອາດຈະລວມເຖິງ, "ຄວາມອົດກັ້ນ" ຫລື "ເຊື່ອຕໍ່ໄປ" ຫລື "ຍັງຄົງສັດຊື່."


generated on Thu Jul 10 08:45:04 2025

## ອົດອາຫານ

### ນິຍາມ

ຄໍາວ່າ "ອົດອາຫານ" ໝາຍເຖິງການຢຸດກິນອາຫານໃນຊ່ວງໄລຍະເວລາໜຶ່ງເຊັ່ນ ໜຶ່ງວັນ ຫລືດົນກວ່ານັ້ນ
ລາງເທື່ອຈະລວມເຖິງການງົດດື່ມນ້ໍາດ້ວຍ.

- ການອົດອາຫານສາມາດຊ່ອຍໃຫ້ຄົນທີ່ຈະມີໃຈຈົດຈໍ່ທີ່ພຣະເຈົ້າ ແລະອະທິຖານໂດຍບໍ່ຖືກລົບກວນ ດ້ວຍການຕຽມອາຫານແລະ
  ການຮັບປະທານ.
- ພຣະເຢຊູໄດ້ຕໍານິພວກຜູ້ນໍາສາສນາຍິວທີ່ອົດອາຫານດ້ວຍເຫດຜົນທີ່ຜິດໆ.
  ພວກເຂົາໄດ້ອົດອາຫານເພື່ອໃຫ້ຄົນອື່ນຄິດວ່າພວກເຂົາເປັນຄົນຊອບທັມ.
- ບາງຄັ້ງ ບາງຄົນອົດອາຫານເພາະພວກເຂົາເສົ້າໂສກ ຫລືເສຍໃຈໃນບາງສິ່ງ.
- ຄໍາວ່າ "ອົດອາຫານ" ສາມາດແປໄດ້ວ່າ "ງົດເວັ້ນຈາກການຮັບປະທານ" ຫລື "ບໍ່ຮັບປະທານ."
- ຄໍາທີ່ວ່າ "ການອົດອາຫານ" ສາມາດແປໄດ້ອີກວ່າ "ເວລາຂອງການງົດຮັບປະທານ" ຫລື "ເວລາຂອງການລະເວັ້ນຈາກອາຫານ."

## ອົດທົນ

### ນິຍາມ

ຄໍາວ່າ“ ອົດທົນ” ໝາຍເຖິງເຮັດຕົວຈິງວ່າ“ ແບກຫາບ” ບາງສິ່ງ. ມັນຍັງມີການນໍາໃຊ້ຕົວເລກຫຼາຍຢ່າງຂອງຄໍາສັບນີ.

- ເມື່ອເວົ້າເຖິງແມ່ຍິງຜູ້ທີ່ຈະລ້ຽງລູກ, ນີ້ໝາຍຄວາມວ່າ, "ໃຫ້ກໍາ ເນີດ" ເດັກນ້ອຍ.
- ການ“ ອົດທົນ” ໝາຍຄວາມວ່າ“ ປະສົບກັບຄວາມຫຍຸ້ງຍາກ”.
  ສິ່ງຫຍຸ້ງຍາກເຫລົ່ານີ້ອາດປະກອບມີຄວາມທຸກທໍລະມານທາງຮ່າງກາຍຫລືທາງອາລົມ.
- ຄໍາເວົ້າທີ່ໃຊ້ກັນທົ່ວໄປໃນພຣະຄໍາພີແມ່ນ“ ໝາກຜົນທີ່ເກີດ” ເຊິ່ງໝາຍຄວາມວ່າ,“ ເກີດໝາກ” ຫລື“ ມີໝາກ”.
- ສໍາເວົ້າທີ່ວ່າ "ເປັນພະຍານ" ໝາຍຄວາມວ່າ "ເປັນການລອງ" ຫຼື "ລາຍງານສິ່ງທີ່ຄົນໄດ້ເຫັນຫລືປະສົບຜົນສໍາເລັດ."
- ຄໍາຖະແຫຼງທີ່ວ່າ "ລູກຊາຍຈະບໍ່ຮັບຜິດຊອບຄວາມຊົ່ວຮ້າຍຂອງພໍ່" ໝາຍ ຄວາມວ່າລາວ "ຈະບໍ່ຮັບຜິດຊອບ" ຫລື
  "ຈະບໍ່ຖືກລົງໂທດຍ້ອນ" ບາບຂອງພໍ່.
- ໂດຍທົ່ວໄປ,ຄໍາເວົ້ານີ້ອາດຈະຖືກແປເປັນ, "ແບກຫາບ" ຫລື "ຮັບຜິດຊອບ" ຫລື "ຜະລິດ" ຫລື "ຖ້ອງມີ" ຫລື "ອົດທົນ",
  ອີງຕາມສະພາບການ.

## ອິມຣີ

### ຂ້ເທັດຈິງ

ອິມຣີ ເປັນຜູ້ບັນຊາການກອງທັບ ຜູ້ທີ່ໄດ້ກາຍເປັນກະສັດ ຜູ້ທີ່ຫົກ ຂອງອິສະຣາເອນ.

- ກະສັດ ອິມຣີ ຊົ່ງຄອບຄອງ 12 ປີ ໃນເມືອງຕີຣະຊາ.
- ເຊັ່ນດຽວກັບ ກະສັດທຸກພຣະອົງ ກ່ອນໜ້າພຣະອົງ, ກະສັດອິມຣີ ຊົ່ງເປັນກະສັດ ທີ່ຊົ່ວຮ້າຍຫລາຍ ທີ່ໄດ້ນໍາປະຊາກອນອິສະຣາເອນ
  ໃຫ້ນະມັດສະການພຣະອື່ນ.
- ອິມຣີ ຢັ່ງເປັນບິດາ ຂອງກະສັດອາຮາບ ອີກດ້ວຍ.

## ອ່າງຢຽບໝາກອງຸ່ນ

### ນິຍາມ

ໃນສະໄໝພຣະຄໍາພີເດີມ "ອ່າງຢຽບໝາກອງຸ່ນ" ເປັນສິ່ງຂອງທີ່ໃຫຍ່
ຫຼືສະຖານທີ່ໂດ່ງເປັນບ່ອນນ້ໍາອງຸ່ນຈະຮອດກມາໄດ້ເພື່ອເຮັດເຫຼົ້າອງຸ່ນໄດ້.

- ໃນອິດສະຣາເອນ ບ່ອນຢຽບໝາກອງຸ່ນເປັນອ່າງຂອງຂະໜາດໃຫຍ່ແລະກວ້າງທີ່ຂຸດເຂົ້າໄປໃນພື້ນຫີນ
  ພວງໝາກອງຸ່ນຈະຖືກຖິ້ມລົງໃນກົ້ນບ່ອນຮາບພຽງຂອງອ່າງແລະຄົນກໍ່ໄດ້ຢຽບຢໍ້າໝາກອງຸ່ນດ້ວຍຕີນ
  ເພື່ອໃຫ້ນ້ໍາອງຸ່ນໄຫຼອອກມາ.
- ໂດຍປົກກະຕິ ອ່າງຢຽບໝາກອງຸ່ນຈະມີສອງແບບ ດ້ວຍກັນຢຽບໝາກອງຸ່ນໃນວິທີເຮັດຂະໜົມ ດັ່ງນັ້ນນ້ໍາອງຸ່ນກໍ
  ໄຫຼອອກມາທາງຫລຸ່ມເພື່ອທີ່ຈະນໍາເຄື່ອງຜອງເອົາມາໃຊ້.


generated on Thu Jul 10 08:45:04 2025

- ຄຳວ່າ " ອ່ຽງຢຽບໝາກອງຸ່ນ " ໄດ້ຖືກນຳມາໃຊ້ໃນການປຽບທຽບໃນພຣະຄຳພີ
ເຖິງພຣະພິໂລດຂອງພຣະເຈົ້າທີ່ໄດ້ເທລົງມາເຖິງປະຊາຊາດຕ່າງໆ ທີ່ຊົ່ວຮ້າຍ

## ອ້າຍ/ນ້ອງຊາຍ

### ນິຍາມ

  ຜູ້ຊາຍອີກຄົນໜຶ່ງທີ່ຊື່ເຊກາຣີຢາ ເປັນຍາມເຝົ້າປະຕູພຣະວິຫານໃນຊ່ວງເວລາຂອງກະສັດດາວິດ.
- ເຊກາຣີຢາ
  ເປັນຊື່ຂອງປະໂລຫິດທີ່ຖືກປະຊາຊົນອິດສະຣາເອນເອົາຫີນຂວາງໃສ່ຕາຍເມື່ອລາວໄດ້ຕໍານິພວກເຂົາທີ່ໄປນະມັດສະການຮູບເຄົ່າລົບ.
- ກະສັດເຊກາຣີຢາເປັນບຸດຊາຍຂອງເຢໂຮໂບອາມແລະລາວໄດ້ປົກຄອງຜາກເໜືອອິດສະຣາເອນຜຽງຫົກເດືອນກ່ອນຖືກຂ້າ.


generated on Thu Jul 10 08:45:04 2025

## ເຊກາຣີຢາ ຫລື ເຊກາລີຢາ (ພັນທະສັນຍາໃໝ່)

### ຂໍ້ເທັດຈິງ

ໃນພັນທະສັນຍາໃໝ່ ເຊກາຣີຢາເປັນປະໂລຫິດຊາວຢິວຜູ້ເປັນບິດາຂອງໂຢຮັນຜູ້ໃຫ້ບັບຕິດສະມາ.

- ເຊກາຣີຢາໄດ້ຮັກພຣະເຈົ້າແລະໄດ້ເຊື່ອຟັງພຣະອົງ.
- ເປັນເວລາຫລາຍປີເຊກາຣີຢາແລະພັນລະຍາຂອງລາວເອລີຊາເບັດ ໄດ້ອະທິຖານຢ່າງຈິງຈັງຂໍໃຫ້ມີບຸດ ແຕ່ກໍຍັງບໍ່ມີເລີຍຈັກຄົນ ເມື່ອພວກເຂົາມີອາຍຸຫລາຍແລ້ວພຣະເຈົ້າກໍໄດ້ຊົງຕອບຄຳອະທິຖານຂອງພວກເຂົາແລະໃຫ້ພວກເຂົາມີບຸດຊາຍໜຶ່ງຄົນ.
- ເຊກາຣີຢາໄດ້ທຳນວຍວ່າໂຢຮັນບຸດຊາຍຂອງເຂົາຈະເປັນຜູ້ເຜີຍພຣະ ວັດຈະນະ ຜູ້ທີ່ຈະປະກາດແລະຕຽມທາງສຳລັບພຣະເມສີອາ.

## ເຊດ

### ຂໍ້ເທັດຈິງ

ໃນປຶ້ມປະຖົມມະການ, ເຊດແມ່ນລູກຊາຍຄົນທີສາມຂອງອາດາມແລະເອວາ.

- ເອວາເວົ້າວ່າເຊດໄດ້ມອບໃຫ້ນາງແທນທີອາເບນລູກຊາຍຂອງນາງທີ່ຖືກຂ້າໂດຍກາອີນນ້ອງຊາຍຂອງລາວ.

ໂນອາແມ່ນ ໜຶ່ງໃນບັນດາເຊື້ອສາຍຂອງເຊດ, ສະນັ້ນທຸກຄົນທີມີຊີວິດຢູ່ຕັ້ງແຕ່ສະໄໝນ້ຳຖ້ວມກໍແມ່ນເຊື້ອສາຍຂອງເຊດ. ເຊດ ແມ່ນຄອບຄົວຂອງລາວທຳອິດທີ່ໄດ້“ ຮ້ອງຫາພຣະນາມຂອງພຣະຜູ້ເປັນເຈົ້າ.”

## ເຊນນາຄາເລັດ

### ຂໍ້ເທັດຈິງ

ເຊນນາຄາເລັດ ແມ່ນກະສັດແຫ່ງອັດຊີເຣຍທີມີອຳນາດເຊິ່ງໄດ້ເຮັດໃຫ້ ເມືອງນີນາເວ ກາຍເປັນເມືອງທີອຸດົມສົມບູນແລະສຳຄັນເມືອງໜຶ່ງ.

- ກະສັດເຊນນາຄາເລັດ ແມ່ນເປັນທີຮູ້ຈັກໃນສົງຄາມຂອງລາວຕໍ່ຕ້ານບາບີໂລນແລະອານາຈັກຢູດາ.
- ລາວເປັນກະສັດທີ່ຈອງຫອງຫລາຍແລະລາວໄດ້ເຍາະເຍີ້ຍ ພຣະເຈົ້າຢາເວ.
- ກະສັດເຊນນາຄາເລັດ ໂຈມຕີກູງເຢຣູຊາເລັມໃນສະໄໝຂອງກະສັດເອເຊເກຍຢາ
- ພຣະເຈົ້າຢາເວ ໄດ້ເຮັດໃຫ້ກອງທັບຂອງ ກະສັດເຊນນາຄາເລັດ ຖືກທຳລາຍ.
- ໃນພຣະສັນຍາເດີມ ໃນພຣະທຳຂ່າວຄາວບັນທຶກບາງເຫດການຂອງການປົກຄອງຂອງກະສັດເຊນນາຄາເລັດ.

## ເຊບາ

### ຂໍ້ເທັດຈິງ

ໃນສະໄໝບູຮານ, ເຊບາເປັນອະລິຍະທຳບູຮານຫລືເປັນແຄ້ວນທີ່ຢູ່ບາງແຫ່ງໃນທາງພາກໃຕ້ຂອງອາຣາເບຍ.

- ແຄ້ວນເຊບາຫລືປະເທດເຊບາອາດຕັ້ງຢູ່ໃກ້ເຊິ່ງປະຈຸບັນເປັນປະເທດເຢເມນຫລືປະເທດເອທິໂອເປຍໃນປະຈຸບັນນີ.
- ຄົນທີ່ອາໃສຢູ່ເປັນລູກຫລານຂອງຮາມ.
- ຣາຊີນີແຫ່ງເຊບາໄດ້ມາຢ້ຽມຢາມກະສັດໂຊໂລໂມນເມື່ອພະນາງໄດ້ຍິນເຖິງກິດຕິສັບໃນຄວາມມັ່ງຄັ່ງແລະສະຕິປັນຍາຂອງພຣະອົງ.
- ມີຜູ້ຊາຍຫລາຍຄົນທີ່ມີຊື່ວ່າ "ເຊບາ" ທີ່ລະບຸລຳດັບວົງຕະກຸນໃນພຣະຄຳພີເດີມ ເປັນໄປໄດ້ວ່າຊື່ຂອງແຄ້ວນເຊບານັ້ນມາຈາກໜຶ່ງໃນຜູ້ຊາຍເຫລົ່ານີ.
- ເມືອງເບເອີເຊບາໄດ້ຖືກຕັດໃຫ້ສັ້ນເປັນເມືອງເຊບາຄັ້ງໜຶ່ງໃນພັນພຣະຄຳພີເດີມ.

## ເຊບູໂລນ

### ຂໍ້ເທັດຈິງ

ເຊບູໂລນເປັນລູກຊາຍຄົນສຸດທ້າຍທີເກີດຈາກຢາໂຄບກັບນາງເລອາແລະເປັນຊື່ຂອງເຜົ່າໜຶ່ງໃນສິບສອງເຜົ່າຂອງອິດສະຣາເອນ.

- ຊາວອິດສະຣາເອນເຜົ່າເຊບູໂລນໄດ້ຮັບແຜ່ນດິນທາງຝັ່ງຕາເວັນຕົກຂອງທະເລຕາຍ.
- ບາງຄັ້ງຊື່ "ເຊບູໂລນ" ຖືກນຳມາໃຊ້ເພື່ອອ້າງເຖິງດິນແດນທີ່ຊົນເຜົ່າອິດສະຣາເອນນີ້ໄດ້ອາໃສຢູ່.


generated on Thu Jul 10 08:45:04 2025

## ເຊມ

### ຂໍ້ເທັດຈິງ

ເຊມເປັນລູກຄົນໜຶ່ງໃນລູກຊາຍສາມຄົນຂອງໂນອາທີ່ໄດ້ເຂົ້າໄປຢູ່ໃນເຮືອກັບໂນອາໃນຂະນະທີ່ນ້ຳຖ້ວມໂລກ
ໄດ້ບັນທຶກໄວ້ໃນພຣະທຳປະຖົມມະການ.

- ເຊມເປັນບັນພະບຸລຸດຂອງອັບຣາຮາມແລະເຊື້ອສາຍຂອງເຂົາ.
- ເຊື້ອສາຍຂອງເຊມເປັນທີ່ຮູ້ຈັກກັນຄື "ເຊມາຍ " ຜູ້ເວົ້າພາສາ "ເສເມຕິກ " ເຊັ່ນວ່າພາສາເຮັບເຣີແລະພາສາອາຫລັບ.
- ພຣະຄຳພີບັນທຶກໄວ້ວ່າ ເຊມມີອາຍຸຍືນຍາວເຖິງ 600 ປີ.

## ເຊຣຸບບາເບນ

### ຂໍ້ເທັດຈິງ

ເຊຣຸບບາເບນ ເປັນຊື່ຂອງອິດສະຣາເອັນສອງຄົນໃນພັນທະສັນຍາເດີມ.

- ໜຶ່ງໃນສອງຄົນນີ້ເຊື້ອສາຍຂອງເຢໂຮຢາກິມແລະເຊເດກີຢາ.
- ເຊຣຸບບາເບນອີກຄົນເປັນລູກຊາຍຂອງເຊອັນຕີເອນ (ເຊອັນເທ) ເປັນຫົວໜ້າຕະກຸນຢູດາ
  ໃນຊ່ວງສະໄໝຂອງເອສະລາແລະເນເຫມີຢາເມືອໄຊຣັດກະສັດເປີເຊັ
  ໄດ້ປົດປ່ອຍຄົນອິດສະຣາເອນອອກຈາກການເປັນຫາດທີ່ກຸງບາບີໂລນ.
- ເຊຣຸບບາເບນແລະມະຫາປະໂລຫິດໂຢຊ່ວຍໄດ້ຢູ່ໃນໝູ່ຄົນເຫຼົ່ານັ້ນຜູ້ທີ່ຊ່ວຍສ້າງພຣະວິຫານແລະແຫ່ນບູຊາຂອງພຣະເຈົ້າ.

## ເຊີຣູບິມ,ເຄຣູບ

### ນິຍາມ

ຄຳວ່າ "ເຊຣູບິມ "ແລະຮູບພະຫູພົດຂອງຄຳນີ້ຄື "ເຄຣູບ" ກ່າວເຖິງສິ່ງທີ່ມີຊີວິດໃນຫອ້ງຟ້າທີ່ພຣະເຈົ້າໄດ້ສ້າງປະເພດໜຶ່ງ
ພຣະຄັມພີອະທິບາຍວ່າເຄຣູບິມມີປີກແລະແປວໄຟ.

- ເຊຣູບິມ ໃຫ້ເຫັນເຖິງພຣະຣັດສະໜາມີແລະອິດອຳນາດຂອງພຣະເຈົ້າແລະເບິ່ງເໝືອນຈະເປັນຜູ້ພິທັກສິ່ງທີ່ບໍຣິສຸດ.
- ຫລັງຈາກອາດາມກັບເອວາໄດ້ເຮັດບາບພຣະເຈົ້າໄດ້ຖ້ຽເຊຣູບິມຖືດາບໄຟຢູ່ດ້ານຕາເວັນອອກຂອງສວນເອເດນເພື່ອທີ່ຈະບໍ່ໃຫ້ຄົນໃດເຂົ້າໄປເຖິງຕົ້ນໄມ້ແຫ່
- ພຣະເຈົ້າໄດ້ຊົງບັນຊາຄົນອິດສຣະເອນໃຫ້ແກະສະຫລັກເຄຣູບສອງຕົນຫັນໜ້າເຂົ້າຫາກັນມີປີກຈອດກັນ
  ຖ້ຽຢູ່ເໜືອພຣະທີ່ນັ່ງກະຣຸນນາຂອງຫີບແຫ່ງພັນທະສັນຍາ.
- ພຣະອົງຊົງບອກໃຫ້ພວກເຂົາປັກຮູບຂອງເຄຣູບເທິງຜ້າກ້ັ້ງຂອງພັບພາດວັຍ.
- ໃນບາງຕອນ ໄດ້ອະທິບາຍສິ່ງທີ່ຊົງສ້າງເຫົ່ລ່ານີ້ວ່າມີສີ່ໜ້າ ຄື

ໜ້າຂອງມະນຸດ ສິງໂຕ ງົວ ແລະນົກອິນຊີ.

- ບາງຄ້ັ ອາດຈະມີຄວາມຄິດວ່າເຊຣູບິມເປັນພວກທູດສະຫັວນ

ແຕ່ພຣະຄັມພີບໍ່ໄດ້ຂຽນໄວ້ຢ່າງຊັດເຈນຢ່າງນັ້ນ.

%ຄຳແນະນຳໃນການແປ

- ຄຳວ່າ "ເຊຣູບິມສາມາດແປໄດ້ວ່າ "ພວກສິ່ງທີ່ຊົງສ້າງທີ່ມີປີກ

ຫລື "ເຫລົ່າຜູ້ພິທັກທີ່ມີປີກ" ຫລື ເຫລົ່າຜູ້ພິທັກຝ່າຍຈິດວິນຍານ ທີ່ມີປີກ" ຫລື ເຫລົ່າຜູ້ພິທັກທີ່ບໍຣິສຸດແລະມີປີກ.

- "ເຊຣູບິມ"ຄວນຈະແປໃນຮູບເອກກະພົດຂອງໆເຊຣູບິມ ຢ່າງໃນຄຳ"ສິ່ງທີ່ຊົງສ້າງທີ່ມີປີກ" ຫລື ຜູ້ພິທັກຝ່າຍວິນຍານທີ່ມີປີກ

ເປັນຕົ້ນ.

- ຂໍໃຫ້ແນ່ໃຈວ່າການແປຄຳນີ້ແຕກຕ່າງຈາກການແປຄຳວ່າ"ທູດສະຫັວນ"
- ຂໍໃຫ້ພິຈາຣະນາເຖິງການແປຫລືຂຽນຄຳນີ້ໃນການແປພຣະຄັມພີໃນພາສາທອ້ງຖິ່ນຫລືພາສາກາງດວັຍ.


generated on Thu Jul 10 08:45:04 2025

## ເຊື່ອ, ເຊື່ອໃນ, ຄວາມເຊື່ອ

### ນິຍາມ

ຄຳວ່າ "ເຊື່ອ" ແລະ "ເຊື່ອໃນ" ມີຄວາມກ່ຽວຂ້ອງກັນຢ່າງໃກ້ຊິດ, ແຕ່ມີຄວາຍໝາຍທີ່ແຕກຕ່າງກັນເລັກນ້ອຍ:

### ຄຳແນະນຳໃນການແປ

- "ເຊື່ອ" ສາມາດຖືກແປເປັນ "ຮູ້ວ່າເປັນຄວາມຈິງ" ຫລື "ຮູ້ວ່າຖືກຕ້ອງ."
- "ເຊື່ອໃນ" ສາມາດຖືກແປເປັນ "ໄວ້ວາງໃຈຢ່າງສົມບູນ" ຫລື "ໄວ້ວາງໃຈແລະເຊື່ອຟັງ" ຫລື "ເພິ່ງພາແລະເຊື່ອຟັງຢ່າງສົມບູນ."

## ເຊື່ອຟັງ, ທີ່ເຊື່ອຟັງ, ການເຊື່ອຟັງ

### ນິຍາມ

ຄຳວ່າ "ເຊື່ອຟັງ" ໝາຍເຖິງ ການເຮັດຕາມທີ່ກຳນົດໄວ້ ຫລືໄດ້ຮັບຄຳສັ່ງມາ. ຄຳວ່າ "ທີ່ເຊື່ອຟັງ"
ອະທິບາຍເຖິງລັກສະນະຂອງບຸກຄົນຊຶ່ງເຊື່ອຟັງ ໃນບາງເທື່ອຄຳສັ່ງ ອາດຈະບໍ່ເປັນລັກສະນະບໍ່ໃຫ້ເຮັດ ສິ່ງໃດສິ່ງໜຶ່ງ ເຊັ່ນ, "ບໍ່ໃຫ້ລັກ."

- ໂດຍປົກກະຕິ ຄຳວ່າ "ເຊື່ອຟັງ" ໃຊ້ໃນບໍລິບົດຂອງການເຊື່ອຟັງຄຳສັ່ງ ຫລືກົດໝາຍຂອງບຸກຄົນ ຜູ້ມີອຳນາດ.
- ຍົກຕົວຢ່າງ ເຊັ່ນ, ປະຊາຊົນເຊື່ອ ຟັງກົດໝາຍ ຊຶ່ງບົດຍັດໂດຍຜູ້ນຳຂອງປະເທດ, ຣາຊອານາຈັກ, ຫລືອົງກອນອື່ນໆ.
- ລູກຫລານເຊື່ອ ຟັງພໍ່ແມ່ ຂອງພວກເຂົາ, ຂ້າທາດເຊື່ອຟັງນາຍຂອງເຂົາ, ປະຊາກອນ ເຊື່ອຟັງພຣະເຈົ້າ,
  ສ່ວນປະຊາຊົນເຊື່ອຟັງກົດໝາຍ ຂອງປະເທດ ຂອງພວກເຂົາ.
- ເມື່ອ ບາງຄົນ ທີ່ມີອຳນາດ ສັ່ງປະຊາຊົນ ບໍ່ໃຫ້ເຮັດບາງສິ່ງ, ພວກເຂົາຈະຕ້ອງ ເຊື່ອຟັງ ໂດຍການບໍ່ເຮັດສິ່ງນັ້ນ.
- ການແປຄຳນີ ສາມາດລວມຄຳ ຫລືຄຳເວົ້າ ທີ່ມີຄວາມໝາຍ, "ເຮັດຫຍັງທີ່ໄດ້ຮັບຄຳສັ່ງ" ຫລື "ຕາມຄຳບັນຊາ" ຫລື
  "ກະທຳສິ່ງທີ່ພຣະເຈົ້າ ຊົງບັນຊາໃຫ້ເຮັດ."
- ຄຳວ່າ "ເຊື່ອຟັງ" ສາມາດແປວ່າ "ການເຮັດຫຍັງຕາມທີ່ຖືກສັ່ງ" ຫລື "ຕາມຄຳສັ່ງ" ຫລື "ການເຮັດສິ່ງທີ ພຣະເຈົ້າຊົງສັ່ງ."

## ເຊື່ອສາຍ,ສືບເຊື່ອສາຍຈາກ

### ນິຍາມ

"ເຊື່ອສາຍ" ຄືຄົນທີ່ມີຄວາມສຳພັນ ໂດຍຕົ້ງທາງສາຍເລືອດ ກັບອີກຄົນຫນຶ່ງ ທີ່ສາມາດສືບຍອ້ນກັບ ໄປໃນປະຫວັດສາດ.

- ຕົວຢ່າງເຊັ່ນ ອັບບຣາຮາມ ເປັນເຊື່ອສາຍຂອງໂນອາ .
- ໄຊ້ເຊື່ອສາຍຂອງບຸກຄົນໃດກໍ່ດີ ຄື ລູກ ຫລານ ເຫລນ ຂອງຄົນນັ້ນ

ແລະ ຕໍ່ໆໄປ ເຊື່ອສາຍຂອງຢາໂຄບ ຄື ຄົນອິດສະຣາເອນ ສິບສອງເຜົ່າ.

- ຄຳເວົ້າທີ່ວ່າ"ສືບເຊື່ອສາຍຈາກ" ອາດກ່າວວ່າ "ເຊື່ອສາຍຂອງ"ເຊັ່ນ"ອັບບຣາຮາມ ສືບເຊື່ອສາຍ ມາຈາກໂນອາ
  "ນີ້ສາມາດແປໄດ້ອີກວ່າ "ຈາກສາຍຄອບຄົວຂອງ"

## ເຊື່ອແປ້ງ, ເຊື່ອແປ້ງທີ່ເຮັດໃຫ້ຟູ

### ນິຍາມ

"ເຊື່ອແປ້ງທີ່ເຮັດໃຫ້ຟູ " ເປັນຄຳຊັບໃຊ້ທົ່ວໄປທີ່ທຳໃຫ້ແປ້ງຂະໜົມປັ້ງຟູຂຶ້ນ" ແປ້ງ " ເປັນເຊື່ອແປ້ງທີ່ເຮັດໃຫ້ຟູຂຶ້ນສະນິດໜຶ່ງ.

- ໃນຄຳແປພາສາອັງກຣິກບາງຄຳແປ ຄຳວ່າເຊື່ອແປ້ງເຮັດໃຫ້ຟູຈະແປວ່າ " ແປ້ງ "
  ຊຶ່ງເປັນຜົງຟູສະໄໝເດີມແປ້ງຂະໜົມພ້ອມດ້ວຍຟອງທຳໃຫ້ແປ້ງຟູຂຶ້ນກ່ອນທີ່ຈະອົບ
  ແປ້ງຖືກນວດລົງໃນເຊື່ອແປ້ງຈົນຟູແຜ່ກະຈ່າຍໄປທົ່ວກ້ອນທັງໝົດຂອງແປ້ງ.
- ໃນສະໄໝພັນທະສັນຍາເດີມການທຳເຊື່ອແປ້ງເຮັດໃຫ້ຟູ ຫລືຜົງຟູທະລິດໂດຍການປ່ອຍໃຫ້ແປ້ງຂະໜົມປັ້ງປະໄວ້ຈັກໜ້ອຍໜຶ່ງ
  ແປ້ງຈຳນວນເລັກນ້ອຍຈາກແປ້ງກ່ອນໜ້ານີ້ໄດ້ຮັບການເກັບໄວ້ເປັນຜົງເຮັດໃຫ້ຟູສຳລັບການໃຊ້ອີກຕໍ່ໄປ.
- "ຄຳວ່າ " ເຊື່ອແປ້ງເຮັດໃຫ້ຟູ "ຫລື " ແປ້ງ"
  ໄດ້ຖືກໃຊ້ສິ່ງປຽບທຽບໃນພຣະຄຳພີເປັນພາບໃນຄວາມບາບທີ່ແຜ່ກະຈ່າຍຜ່ານຊີວິດຂອງບຸກຄົນຫລືບາບທີ່ມີອິດທິພົນຕໍ່ຄົນອື່ນໄດ້ຢ່າງໃດ.
- ນອກຈາກນີ້ຍັງອ້າງເຖິງການສອນປອມ ຊຶ່ງເຫັນຢູ່ປະຈຳແຜ່ໄປຍັງປະຊາຊົນຈຳນວນຫລວງຫລາຍແລະມີອິດທິພົນຕໍ່ພວກເຂົາ.

- ຄຳວ່າ " ເຊືອແປ້ງທີເຮັດໃຫ້ຟູ"
ຖືກໃຊ້ໃນທາງບວກດ້ວຍເພືອອະທິບາຍວ່າອິດທິພົນອານາຈັກຂອງພຣະເຈົ້າແຜ່ຂະຫຍາຍຈາກຄົນໜຶງໄປສູ່ອີກຄົນໜຶງໄດ້ຢ່າງໃດ.

### ຄຳແນະນຳໃນການແປ

- ນີສາມາດແປໄດ້ວ່າເປັນ "ເຊືອແປ້ງເຮັດໃຫ້ຟູ " ຫລື " ສານທີເຮັດໃຫ້ຂະໜົມປັ້ງຟູຂຶນ " ຫລື " ສານທີເຮັດໃຫ້ໃຫຍ່ຂຶນ" ຄຳວ່າ "ໃຫຍ່ຂຶນ " ອາດອະທິບາຍວ່າ " ຂະຫຍາຍ" ຫລື" ໃຫຍ່ຂຶນ"ຫລື " ຟອງຕົວຂຶນ.
- ຖ້າມີເຄືອງເຮັດໃຫ້ຟູຂຶນໃນທ້ອງຖິນທີໃຊ້ເຮັດໃຫ້ແປ້ງຂະໜົມປັ້ງຟູຂຶນ ຄຳນັນກໍສາມາດໃຊ້ໄດ້
ຖ້າມີຄຳທີເປັນທີຮູ້ຈັກກັນດີຢູ່ແລ້ວໃນພາສາ ຄຳທົວໄປທີມີຄວາມໝາຍວ່າ " ເຊືອແປ້ງເຮັດໃຫ້ຟູ "
ກໍເປັນຄຳທີດີທີສຸດທີຈະສາມາດໃຊ້ຄຳນີໄດ້.

## ເຊເດກີຢາ ຫລື ເຊຄາຣີຢາ

### ຂ້ເທັດຈິງ

ເຊເດກີຢາ ລູກຊາຍຂອງໂຢສີຢາ ເປັນກະສັດອົງສຸດທ້າຍຂອງຢູດາ (597-587 ) ກ່ອນຄຣິສຕະຊະສັກຄະຣາດ)
ນອກຈາກນີຍັງມີອີກຫຼາຍຄົນທີຊື່ເຊເດກີຢາ ໃນພັນທະສັນຍາເດີມ.

- ກະສັດເນບູກາດເນັດຊາໄດ້ແຕ່ງຕັ້ງເຊເດກີຢາເປັນກະສັດແຫ່ງຢູດາ ຫລັງຈາກທີໄດ້ຈັບກະສັດເຢໂຮຢາກິມ ແລະ
ໄດ້ນຳເຂົາໄປຍັງກຸງບາບີໂລນເຊເດກີຢາ ຕໍ່ມາ ໄດ້ລັບຜິນທີຕາມມາ
ກະສັດເນບູກັດເນັດຊາໄດ້ຈັບກຸມພວກເຂົາແລະໄດ້ທຳລາຍກຸງເຢຣູຊາເລັມທັງໝົດ.
- ເຊເດກີຢາ ລູກຊາຍຂອງເຄນາອັນນາ ເປັນຜູ້ປະກາດພຣະທຳປອມໃນສະໄໝຂອງກະສັດອາຮາດແຫ່ງອິດສະຣາເອນ.
- ຜູ້ຊາຍທີຊື ເຊເດກີຢາ ເປັນຄົນໜຶງໃນຈຳພວກນັນທີໄດ້ລົງຊື່ໃນຂ້ຕົກລົງກັບອົງພຣະຜູ້ເປັນເຈົ້າໃນສະໄໝຂອງເນເຫມີຢາ.

## ເຊເບດາຍ

### ຂ້ເທັດຈິງ

ເຊເບດາຍ ເປັນຄົນຫາປາຈາກຄາລີເລ ຜູ້ຊຶງເປັນທີຮູ້ຈັກເພາະລູກຊາຍຂອງລາວຄື ຢາໂກໂບແລະໂຢຮັນເປັນສາວົກຂອງພຣະເຢຊູ
ພວກເຂົາຖືກລະບຸໄວ້ໃນພັນທະສັນຍາໃຫມ່ຢູ່ເລືອຍໆ ໃນຖານະ "ລູກຊາຍຂອງເຊເບດາຍ"

- ພວກລູກຊາຍຂອງເຊເບດາຍກໍເປັນຊາວຫາປາດ້ວຍເຊັ່ນກັນແລະໄດ້ເຮັດວຽກກັບເຂົາໃນການຈັບປາ.
- ຢາໂກໂບແລະໂຢຮັນ ໄດ້ລາຈາກການຫາປາຂອງພໍ່ພວກເຂົາ ຄືເຊເບດາຍແລະໄດ້ຈາກໄປຕິດຕາມພຣະເຢຊູ.

## ເຊຟານີຢາ

### ຂ້ເທັດຈິງ

ເຊຟານີຢາ ລູກຊາຍຂອງກູຊີ
ເປັນຜູ້ປະກາດພຣະທຳທີໄດ້ອາໃສຢູ່ໃນກຸງເຢຣູຊາເລັມແລະເປັນຜູ້ປະກາດພຣະທຳໃນສະໄໝໂຢສີຢາກະສັດຂອງຢູດາລາວໄດ້ມີຊີວິດຢູ່ໃນສະໄໝດຽວກັນກັບເຢ

- ເຊ
ຟານີຢາໄດ້ຕຳນິປະຊາຊົນຂອງຢູດາທີໄປນະມັດສະການພະທຽມທັງຫຼາຍການປະກາດພຣະທຳຂອງລາວໄດ້ຖືກບັນທຶກໄວ້ໃນພຣະທຳໂຣມເຊ
ຟານີຢາໃນພັນທະສັນຍາເດີມ.
- ມີຜູ້ຊາຍອີກຫຼາຍຄົນໃນພັນທະສັນຍາເດີມທີຊື່ເຊຟານີຢາສ່ວນໃຫຍ່ເປັນປະໂລຫິດ.

## ເຍີຍິງ, ຍະໂສ,ຮີກເຫີມ, ຈອງຫອງ, ໂອຫັ້ງ,ຜະຍອງ,ໂອ້ອວດ, ອວດດີ,

### ນິຍາມ

ຄຳວ່າ " ເຍີຍິງ " ນີໝາຍເຖິງການອວດຕົວ ໂດຍປົກກະຕິແລ້ວຈະສະແດງອອກໃຫ້ເຫັນໄດ້ຢ່າງຊັດເຈນ.

- ຄົນທີເຍີຍິງມັກຈະອວດຕົວຢູ່ເລືອຍໆ.
- ໂດຍປົກກະຕິແລ້ວ ການເຍີຍິງຈະລວມເຖິງການຄິດວ່າຄົນອືນບໍ່ສຳຄັນຫລືບໍ່ເກັ່ງເທົ່າກັບຕົວເອງ.
- ຄົນທີບໍ່ໃຫ້ກຽດແດ່ພຣະເຈົ້າແລະຄົນທີຫໍ່ລະຍົດຕໍ່ພຣະອົງຈະເຍີຍິງ ເພາະວ່າພວກເຂົາບໍ່ຍອມຮັບວ່າພຣະເຈົ້າຜູ້ຊຶງຍິງໃຫຍ່ຊໍ່າໃດໝໍ.


generated on Thu Jul 10 08:45:04 2025

## ເດລີລາ

### ຂໍ້ເທັດຈິງ

ເດລີລາ ເປັນຍິງ ຊາວຟີລິດສະຕິນ ຜູ້ຊຶ່ງແຊມຊັ່ນຮັກ ແຕ່ ນາງ ບໍ່ເມັຍຂອງເຂົາ.

- ເດລີລາ ໄດ້ຮັກເງິນຫລາຍ ກ໊ວຫີນໆຮັກແຊມຊັ່ນ .
- ຄົນຟີລິດສະຕິນ ໄດ້ຕິດສິນບົນ ເດລີລາ ເພື່ອຫລອກໃຫ້ແຊມຊັ່ນບອກນາງ ເຖິງວິທີທີ່ຈະເຮັດໃຫ້ເຂົາ ອ່ອນແອລົງໄດ້ ແລະ ເມື່ອພາລະກຳລັງ ຂອງເຂົາ ຫມົດໄປແລ້ວ ຄົນ ຟີລິດສະຕິນ ກໍໄດ້ຈັບກຸມເຂົາ.

## ເດີນ, ຫລື ຍ່າງ

### ນິຍາມ

ຄຳເວົ້າວ່າ "ຍ່າງມັກໃຊ້ໃນການປຽບທຽບທີ່ໝາຍເຖິງການ "ການດຳ ເນີນຊີວິດ"

- "ເອນົກຍ່າງໄປກັບພຣະເຈົ້າ" ໝາຍເຖິງເອນົກໄດ້ດຳເນີນຊີວິດໃກ້ສິດກັບພຣະເຈົ້າ.
- "ການດຳເນີນໂດຍພຣະວິນຍານ " ໝາຍເຖິງການໄດ້ຮັບຄຳແນະນຳໂດຍພຣະວິນຍານບໍຣິສຸດເພື່ອໃຫ້ເຮົາເຮັດສິ່ງຕ່າງໆ ເປັນທີ່ຊອບຕໍ່ນ້ຳພຣະໄທແລະຖວາຍກຽດແດ່ພຣະເຈົ້າ.
- "ເດີນເຂົ້າມາທາງໃນ" ຄຳສັ່ງຂອງພຣະເຈົ້າຫລືວິທີທາງຂອງພຣະເຈົ້າໝາຍເຖິງ "ດຳເນີນຊີວິດຢູ່ໃນການເຊື່ອຟັງຄຳສັ່ງຂອງພຣະອົງ" ຄື "ເຊື່ອ ຟັງຄຳສັ່ງທັ້ງຫລາຍຂອງພຣະອົງ" ຫລື " ທຳຕາມພຣະປະສົງຂອງພຣະ ອົງ."
- ເມື່ອພຣະເຈົ້າຊົງສັ່ງວ່າພຣະອົງຈະ "ດຳເນີນຖ້ຳມກາງ" ຄົນຂອງພຣະອົງນັ້ນໝາຍຄວາມວ່າພຣະອົງຈະສະຖິດຢູ່ຖ້ຳມກາງພວກເຂົາຫລືມີຄວາມສັມພັນກັບພວກເຂົາຢ່າງໃກ້ສິດ.
- ການ "ຍ່າງໃນທາງຕົ່ງກັນຂ້ຳມ" ໝາຍເຖິງການມີຊີວິດຢູ່ຫລືການປະພຶດຕົນໃນທາງທີ່ຂັດແຍ້ງຕໍ່ບາງສິ່ງບາງຢ່າງຫລືບາງຄົນ.
- ການ "ຍ່າງຕາມ" ໝາຍເຖິງການສະແຫວງຫາຫລືຕິດຕາມຄົນບາງຄົນຫລືບາງສິ່ງບາງຢ່າງ ນອກຈາກນີ້ຍັງສາມາດໝາຍເຖິງການກະທຳໃນລັກສະນະດຽວກັນກັບຄົນອື່ນ.

### ຄຳແນະນຳໃນການແປ

- ສິ່ງດີທີ່ສຸດໃນການແປ "ຍ່າງ" ຕາມຕົວອັກສອນຈົນກວ່າຄວາມໝາຍຖືກຕ້ອງຈະເປັນທີ່ເຂົ້າໃຈໄດ້.
- ອີກຢ່າງໜຶ່ງ ການໃຊ້ "ຍ່າງ" ໃນການປຽບທຽບ ສາມາດແປໄດ້ວ່າ

" ດຳເນີນຊີວິດຢູ່" ຫລື "ການກະທຳ" ຫລື "ປະພຶດຕາມ."

- ຄຳທີ່ວ່າ "ຍ່າງໄປໂດຍພຣະວິນຍານ" ໝາຍຄວາມວ່າ "ດຳເນີນຊີວິດຢູ່ໃນການເຊື່ອຟັງພຣະວິນຍານບໍຣິສຸດ" ຫລື "ປະພຶດຕາມທາງທີ່ພຣະ ວິນຍານບໍຣິສຸດພ້ຳພຣະທັຍ" ຫລື "ເຮັດສິ່ງຕ່າງໆເປັ່ນທີ່ພ້ຳພຣະທັຍພຣະເຈົ້າ ຕາມທີ່ພຣະວິນຍານບໍຣິສຸດຊົງນຳທ່ານ."
- ເພື່ອ "ຍ່າງໄປຕາມພຣະບັນຊາຂອງພຣະເຈົ້າ" ໝາຍຄວາມວ່າ "ການດຳເນີນຊີວິດຕາມພຣະບັນຊາຂອງພຣະເຈົ້າ" ຫລື "ເຊື່ອຟັງຄຳສັ່ງຂອງພຣະເຈົ້າ."
- ຖ້ອຍຄຳທີ່ວ່າ "ຍ່າງໄປກັບພຣະເຈົ້າ" ອາດໝາຍຄວາມວ່າ "ໄດ້ດຳເນີນຊີວິດທີ່ມີຄວາມສັມພັນໃກ້ສິດກັບພຣະເຈົ້າໂດຍການເຊື່ອຟັງແລະຖວາຍກຽດແດ່ພຣະອົງ.

## ເດືອນໃຫມ່

### ນິຍາມ

ຄຳ ວ່າ“ ເດືອນໃໝ່” ໃນພຣະຄຳພີໝາຍເຖິງເດືອນເມື່ອມັນຄ້າຍຄືກັບແສງນ້ອຍໆທີ່ມີຮູບເປັ່ນວົງຄືເຂົ້າຄວາຍ. ນີ້ແມ່ນໄລຍະເລີ່ມຕົ້ນຂອງເດືອນໃນຂະນະທີ່ມັນເຄື່ອນທີ່ໃນວົງໂຄຈອນຂອງມັນອ້ອມຮອບໂລກ ໜ່ວຍໂລກ.


generated on Thu Jul 10 08:45:04 2025

## ເຕັນ

### ນິຍາມ

ເຕັນເປັນທີ່ພັກພາອາໃສ່ທີ່ເຮັດມາຈາກຜ້າກະສອບທີ່ທົນທານເຊິ່ງຖືກຄຸມໄວ້ຫົວໂຄ່ງສ້າງຂອງເສົາແລະຍຶດຕິດກັບພວກມັນ.

- ເຕັນສາມາດມີຂະນາດນ້ອຍ ທີ່ມີພື້ນທີ່ໃຊ້ສໍາຫລັບສອງຄົນໄດ້ນອນຫລັບ,
  ຫຼືອາດຈະໃຫຍ່ຫລາຍເພື່ອໃຊ້ສໍາຫລັບການພັກຜ່ອນຫລັບນອນຂອງຄົນໃນຄອບຄົວ, ເຮັດອາຫານແລະຢູ່ອາໄສ.
- ສໍາລັບປະຊາຊົນຈໍານວນຫຼາຍ, ຜ້າເຕັນຖືກນໍາໃຊ້ເປັນສະຖານທີ່ທີ່ຢູ່ອາໄສຖາວອນ. ຍົກຕົວຢ່າງ,
  ໃນຊ່ວງເວລາສ່ວນໃຫຍ່ທີ່ຄອບຄົວຂອງອັບຣາຮາມອາໄສຢູ່ໃນແຜ່ນດິນການາອານ, ພວກເຂົາອາໄສຢູ່ໃນເຕັນໃຫຍ່ໆທີ່ເຮັດດ້ວຍຜ້າ
  ໝາໆ ທີ່ເຮັດດ້ວຍຂົນແກ້.
- ຊາວອິດສະລາແອນຍັງອາໄສຢູ່ໃນເຕັນໃນລະຫວ່າງການຍ່າງປະມານສີ່ສິບປີຜ່ານທະເລຊາຍ ຊີນາຍ.
- ອາຄານຫໍເຕັນແມ່ນປະເພດຂອງເຕັນໃຫຍ່ຫລາຍ, ມີຝາ ໝາ ເຮັດດ້ວຍຜ້າມ່ານ.
- ເມື່ອອັກຄະສາວົກໂປໂລເດີນທາງໄປເມືອງຕ່າງໆເພື່ອແບ່ງປັນຂ່າວປະເສີດ, ລາວໄດ້ສ້າງກະໂຈມເພື່ອຫາເງິນເພື່ອລ້ຽງດູຕົນເອງ.
- ຄໍາວ່າ“ ເຕັນ” ບາງຄັ້ງໃຊ້ໃນຮູບປຽບທຽບໂດຍຫົວໄປເພື່ອເວົ້າເຖິງບ່ອນທີ່ປະຊາຊົນອາໄສຢູ່. ນີ້ຍັງສາມາດຖືກແປເປັນ "ເຮືອນ" ຫຼື "ທີ່ຢູ່ອາໄສ" ຫຼື "ເຮືອນ."

## ເຕັນປະຊຸມ

### ນິຍາມ

ຄໍາວ່າ“ເຕັນປະຊຸມ” ໝາຍເຖິງຫໍເຕັນເຊິ່ງເປັນສະຖານທີ່ຊົ່ວຄາວທີ່ພຣະເຈົ້າພົບກັບໂມເຊກ່ອນທີ່ຫໍເຕັນຈະຖືກສ້າງຂຶ້ນ.

- ເຕັນປະຊຸມໄດ້ຖືກຈັດຕັ້ງຢູ່ນອກຄ້າຍຂອງຊາວອິດສະລາເອນ.
- ເມື່ອໂມເຊໄດ້ໄປທີ່ຫໍເຕັນເພື່ອເຂົ້າເຝົ້າພຣະເຈົ້າ, ເສົາເມກຈະປະກົດຢູ່ໜ້າເຕັນ ສະແດງໃຫ້ເຫັນເຖິງການປະທັບຂອງພຣະເຈົ້າ.
- ຫລັງຈາກທີ່ຄົນອິດສະຣາເອນໄດ້ສ້າງຫໍເຕັນຂຶ້ນ ເຕັນຊົ່ວຄາວກໍບໍ່ຈໍາເປັນອີກຕໍ່ໄປ "ເຕັນປະຊຸມ" ໃນບາງຢ່າງກໍອ້າງເຖິງຫໍເຕັນ.

## ເຕັມດ້ວຍຣິດເດດ, ຣິດທານຸພາບ

### ນິຍາມ

ຄໍາວ່າ "ເຕັມດ້ວຍຣິດເດດ" ແລະ "ຣິດທານຸພາບ" ບົ່ງບອກເຖິງການມີພະລັງ ຫລືມີອໍານາດຍິ່ງໃຫຍ່.

- ມີຫລາຍເທື່ອທີ່ຄໍາວ່າ "ຣິດທານຸພາບ" ແມ່ນໃຊ້ຄໍາອື່ນ ຄືຄໍາວ່າ "ກໍາລັງ." ແຕ່ຕອນໃດທີ່ເວົ້າກ່ຽວກັບພຣະເຈົ້າ, ມັນສາມາດແປວ່າ
  "ພະລັງ."
- ຄໍາເວົ້າ, "ພວກຜູ້ຊາຍທີ່ມີຣິດເດດ" ສ່ວນຫລາຍມັກບົ່ງບອກເຖິງພວກຜູ້ຊາຍທີ່ມີຄວາມກ້າຫານ ແລະມີໄຊຊະນະໃນການຕໍ່ສູ້.
  ໃນວົງດົນຕຣີຂອງດາວິດ ມີຜູ້ຊາຍຫລາຍຄົນທີ່ມີທັງຄວາມສັດຊື ແລະ ຊ່ວຍຄຸ້ມຄອງຮັກສາລາວ ເຊິ່ງຈະເອີ້ນຄົນເຫລົ່ານັ້ນວ່າແມ່ນ
  "ຜູ້ຊາຍທີ່ມີຣິດເດດ."
- ເຊັ່ນດຽວກັນ ພຣະເຈົ້າ ຄືຜູ້ທີ່ຖືກບົ່ງບອກໄວ້ຢ່າງຊັດເຈນວ່າ "ເປັນອົງຜູ້ຊົ່ງຣິດເດດ."
- ຄໍາເວົ້າ, ກິດຈະການທີ່ເຕັມດ້ວຍຣິດທານຸພາບ ຕາມປົກກະຕິຈະບົ່ງບອກເຖິງສິ່ງມະຫັດສະຈັນຕ່າງໆ ທີ່ພຣະເຈົ້າຊົ່ງກະທໍາ,
  ໂດຍສະເພາະເລື່ອງການອັດສະຈັນຕ່າງໆ.
- ຄໍານີ ເຊື່ອມໂຍງກັບຄໍາວ່າ, ຜູ້ຊົ່ງຣິດທານຸພາບສູງສຸດ, ເຊິ່ງເປັນຄໍາທີ່ໃຊ້ອະທິບາຍສໍາລັບພຣະເຈົ້າ, ມີຄວາມໝາຍວ່າ ພຣະອົງ
  ຄືຜູ້ທີ່ມີຣິດອໍານາດຄົບຖ້ວນສົມບູນ.

### ຄໍາແນະນໍາໃນການແປ

- ຂຶ້ນຢູ່ກັບເນື້ອໃນຂອງເລື່ອງ, ຄໍາວ່າ "ເຕັມດ້ວຍຣິດເດດ" ສາມາດແປໄດ້ອີກວ່າ "ເຕັມດ້ວຍອໍານາດ" ຫລື "ມະຫັດສະຈັນ" ຫລື
  "ມີກໍາລັງຫລາຍ."
- ປະໂຫຍກ "ຣິດທານຸພາບຂອງພຣະອົງ" ສາມາດແປໄດ້ອີກວ່າ "ກໍາລັງຂອງພຣະອົງ" ຫລື "ອໍານາດຂອງພຣະອົງ."
- ໃນພຣະທໍາກິດຈະການ ບົດທີ 7, ໄດ້ບັນລະຍາຍເຖິງໂມເຊວ່າ "ທັງຄໍາເວົ້າແລະການກະທໍາເຕັມດ້ວຍຣິດເດດ." ນີ້ກໍສາມາດແປໄດ້ວ່າ,
  "ໂມເຊໄດ້ເວົ້າຖ້ອຍຄໍາທີ່ມີຣິດອໍານາດຈາກພຣະເຈົ້າ ແລະ ໄດ້ເຮັດສິ່ງຕ່າງໆ ທີ່ມະຫັດສະຈັນ" ຫລື
  "ໂມເຊໄດ້ເວົ້າຖ້ອຍຄໍາທີ່ມີພະລັງຂອງພຣະເຈົ້າ ແລະ ໄດ້ເຮັດສິ່ງທີ່ອັດສະຈັນຕ່າງໆ."
- ຂຶ້ນຢູ່ກັບເນື້ອໃນຂອງເລື່ອງ, "ກິດຈະການທີ່ເຕັມດ້ວຍຣິດທານຸພາບ" ສາມາດແປໄດ້ອີກວ່າ, "ທຸກສິ່ງທີ່ມະຫັດສະຈັນນັ້ນ
  ແມ່ນພຣະເຈົ້າເປັນຜູ້ກະທໍາ" ຫລື "ສິ່ງມະຫັດສະຈັນຕ່າງໆ" ຫລື "ພຣະເຈົ້າກະທໍາທຸກສິ່ງດ້ວຍຣິດອໍານາດ."


generated on Thu Jul 10 08:45:04 2025

- ຄຳວ່າ "ຣິດທານຸພາຍ" ສາມາດແປໄດ້ອີກວ່າ "ອຳນາດ" ຫລື "ພະລັງຍິ່ງໃຫຍ່."
- ຢ່າສັບສົນຄຳນີ້ກັບຄຳໃນພາສາອັງກິດ ທີ່ຖືກໃຊ້ເພື່ອສະແດງຄວາມເປັນໄປໄດ້, ເຊັ່ນ "ຝົນມັນອາດຈະຕົກ."

## ເຕືອນສະຕິ, ການເຕືອນສະຕິ

### ນິຍາມ

ຄຳວ່າ "ເຕືອນສະຕິ" ໝາຍເຖິງການໝູນໃຈທີ່ໝັກແໜ້ນແລະກະຕຸ້ນໃຫ້ບາງຄົນເຮັດໃນສິ່ງທີ່ຖືກຕ້ອງ. ແມ່ນຄຳໝູນໃຈທີ່ເອີ້ນວ່າ "ການເຕືອນສະຕິ."

- ຈຸດປະສົງຂອງການເຕືອນສະຕິແມ່ນເພື່ອໂນ້ມນ້າວຄົນອື່ນໃຫ້ຫລີກລ້ຽງຄວາມບາບ ແລະໃຫ້ເຊື່ອຟັງນ້ຳພຣະໄທພຣະເຈົ້າ.
- ພັນທະສັນຍາໃໝ່ສອນໃຫ້ບັນດາຄຣິສຕຽນໃຫ້ເຕືອນສະຕິເຊິ່ງກັນແລະກັນໃນຄວາມຮັກ, ບໍ່ແມ່ນດ້ວຍຄວາມຮຸນແຮງ ຫລືຫຍາບຊ້ຳ.

### ຄຳແນະນຳໃນການແປ

- ຄຳວ່າ, "ເຕືອນສະຕິ" ສາມາດແປໄດ້ອີກວ່າ "ກະຕຸ້ນຢ່າງໜັກແໜ້ນ" ຫລື "ໂນ້ມນ້າວ" ຫລື "ແນະນຳ."
  ທັງນີ້ແມ່ນຂຶ້ນຢູ່ກັບກໍລະນີນັ້ນໆ
- ໃຫ້ແນ່ໃຈວ່າການແປຂອງຄຳນີ້ບໍ່ໄດ້ໝາຍຄວາມວ່າ ຄົນທີ່ເຕືອນສະຕິນັ້ນຄຽດຮ້າຍ.
  ຄຳນີ້ຄວນຊີ້ເຖິງຄວາມແຂງແກ່ງແລະຄວາມຈິງຈັງ, ແຕ່ບໍ່ຊີ້ເຖິງຄຳເວົ້າທີ່ຄຽດຮ້າຍ.
- ໃນກໍລະນີສ່ວນຫລາຍ, ຄຳວ່າ "ເຕືອນສະຕິ" ຄວນຖືກແປໃນແບບທີ່ແຕກຕ່າງກັບຄຳວ່າ "ໝູນໃຈ,"
  ທີ່ໝາຍເຖິງການໃຫ້ແຮງບັນດານໃຈ, ການສ້າງຄວາມໝັ້ນໃຈ, ຫລືເລົ້າໂລມໃຈບາງຄົນ.
- ໂດຍປົກກະຕິແລ້ວຄຳນີ້ສາມາດແປໄດ້ຫລາຍແບບຈາກຄຳວ່າ "ວ່າກ່າວ," ຊຶ່ງໝາຍເຖິງການເຕືອນ
  ຫລືການແກ້ໄຂພຶດຕິກຳຂອງບາງຄົນທີ່ລາວເຮັດບໍ່ຖືກຕ້ອງ.

## ເຕົາ, ເຕົາອົບ

### ນິຍາມ

ເຕົາຄືທີ່ອົບຂະໜາດໃຫຍ່ໃຊ້ສຳລັບການເຮັດໃຫ້ສິ່ງຂອງຮ້ອນ ດ້ວຍອຸນນະພູມທີ່ມີຄວາມຮ້ອນສູງ.

- ໃນສະໄໝບູຮານ, ເຕົາອົບສ່ວນຫລາຍເອົາໄວ້ໃຊ້ຫລອມໂລຫະເພື່ອເຮັດສິ່ງຂອງເຊັ່ນ ໝໍ້ຫຳອາຫານ, ເຄື່ອງປະດັບ, ອາວຸດ,
  ແລະຮູບເຄົ່າລົບ.
- ເຕົາອົບຍັງເອົາໄວ້ໃຊ້ສຳລັບການເຮັດເຄື່ອງປັ້ນດິນເຜົາ.
- ບາງຄັ້ງເຕົາອົບກໍເອົາໄວ້ໃຊ້ອ້າງປຽບທຽບເພື່ອອະທິບາຍເຖິງບາງສິ່ງທີ່ຮ້ອນແຮງຫລາຍໆ.

## ເຖົ່າ, ຂີ້ເຖົ່າ, ຜົງຂີ້ດິນ

### ນິຍາມ

ຄຳວ່າ "ເຖົ່າ"ຫຼື "ຂີ້ເຖົ່າ" ເວົ້າເຖິງສານທີ່ເປັນຜົງສີເທົ່າທີ່ເຫລືອຈາກການເຜົາໄໝ້.
ບາງຄັ້ງຖືກໃຊ້ເປັນພາບປຽບທຽບໝາຍເຖິງບາງສິ່ງບາງຢ່າງທີ່ບໍ່ມີຄ່າ ຫຼືບໍ່ມີປະໂຫຍດ.

- ໃນພຣະຄຳພີບາງຄັ້ງຄຳວ່າ "ຜົງຂີ້ດິນ" ຖືກໃຊ້ເມື່ອມີການເວົ້າເຖິງຂີ້ເຖົ່າ ອາດຈະມີຄວາມໝາຍອີກຢ່າງວ່າ ຜົງຂີ້ດິນທີ່ລະອຽດ
  ຜົງຂີ້ດິນທີ່ບໍ່ແໜ້ນທີ່ລວມຕົວກັນຢູ່ເທິງພື້ນແຫ້ງ.
- ຄຳວ່າ "ກອງເຖົ່າ" ຄືກອງຂອງຂີ້ເຖົ່າ
- ໃນສະໄໝບູຮານ ການນັ່ງເທິງຂີ້ເຖົ່າເປັນເຄື່ອງໝາຍເຖິງການທົນທຸກ ຫຼືໂສກເສົ້າ.
- ເມື່ອມີການໂສກເສົ້າເສຍໃຈ ກໍຈະມີທຳນຽມສວມເສື້ອຜ້າກະສອບແລະນັ່ງເທິງຂີ້ເຖົ່າຫຼືເອົາຂີ້ເຖົ່າມາໂຮຍໃສ່ເທິງຫົວ.
- ການເອົາຂີ້ເຖົ່າມາໂຮຍໃສ່ເທິງຫົວກໍເປັນເຄື່ອງໝາຍສະແດງເຖິງຄວາມອັບອາຍຂາຍໜ້າແລະຄວາມລຳບາກໃຈ.
- ບາງຄົນຢາກໄດ້ສິ່ງທີ່ບໍ່ມີຄ່າ ກໍຈະມີຄຳເວົ້າທີ່ບອກວ່າ "ກິນແຕ່ຂີ້ເຖົ່າ"
- ເມື່ອແປຄຳວ່າ "ຂີ້ເຖົ່າ" ໃຫ້ໃຊ້ໃນຄຳພາສາທາງການ ຄືສິ່ງທີ່ເຫລືອຈາກການເຜົາໄໝ້ຂອງໄມ້.
- ໃຫ້ສັງເກດຄຳວ່າ"ຕົ້ນເທບທາໂຣ ຫຼື ຕົ້ນແອດ (ash tree)" ຈະໃຊ້ຄົນລະຄຳກັນກັບຄຳວ່າຂີ້ເຖົ່າ.


generated on Thu Jul 10 08:45:04 2025

## ເທດສະການ, ງານລ້ຽງ

### ນິຍາມ

ຄໍາວ່າ "ເທດສະການ" ກ່າວເຖິງງານທີ່ມີຄົນຫລວງຫລາຍມາຮ່ວມກັນຮັບປະທານອາຫານຄາບໃຫຍ່,
ຫລາຍໆຄັ້ງຄືການສະເຫລີມສະຫລອງບາງຢ່າງຮ່ວມກັນ. ການຈັດ "ເທດສະການ"
ໝາຍເຖິງການຮັບປະທານອາຫານຫລວງຫລາຍຫລືຮ່ວມໃນການຮັບປະທານອາຫານງານລ້ຽງຮ່ວມກັນ.

- ຫລາຍຄັ້ງມີອາຫານພິເສດທີ່ກິນໃນງານລ້ຽງສະເຫລີມສະຫລອງບາງຢ່າງ.
- ເທດສະການທາງສາສນາທີ່ພຣະເຈົ້າຊົງໄດ້ບັນຊາໃຫ້ຄົນຍິວສະເຫລີມສະຫລອງມັກຮ່ວມກັນທັງຈັດງານລ້ຽງດ້ວຍກັນ.
  ດ້ວຍເຫດນີ້ເທດສະການມັກຖືກຮຽກວ່າ "ງານລ້ຽງ."
- ໃນສະໄໝພຣະຄໍາພີ, ກະສັດແລະຄົນລ້ໍາລວຍຮັ່ງມີແລະຄົນທີ່ມີອໍານາດມັກຈັດງານລ້ຽງ
  ຫລາຍໆເທື່ອເພື່ອຮັບຮອງຄອບຄົວຂອງພວກເຂົາຫລືບັນດາໝູ່ເພື່ອນ.
- ໃນເລື່ອງລູກນ້ອຍຫລົງຫາຍ, ພໍ່ໄດ້ຈັດງານລ້ຽງພິເສດເພື່ອກຽມສະຫລອງການກັບມາຂອງລູກຊາຍຂອງເຂົາ.
- ບາງຄັ້ງງານລ້ຽງຈະດໍາເນີນໄປເລື່ອຍໆປະມານເຈັດວັນຫລືຫລາຍກ່ວານັ້ນ.
- ຄໍາວ່າ "ງານລ້ຽງ" ສາມາດແປໄດ້ວ່າ "ກິນຢ່າງຟຸ່ມເຟືອຍ" ຫລື "ສະຫລອງໂດຍການການຮັບປະທານອາຫານຢ່າງຫລວງຫລາຍ"
  ຫລື "ຮັບປະທານພິເສດຄາບໃຫຍ່."
- ບາງສໍານວນ, "ງານລ້ຽງ" ສາມາດແປໄດ້ວ່າ, "ການສະຫລອງຮ່ວມກັນດ້ວຍອາຫານຄາບໃຫຍ່" ຫລື
  "ອາຫານຄາບທີ່ມີອາຫານຫລວງຫລາຍ" ຫລື "ເທດສະການອາຫານ."

## ເທດສະຫນາ

### ນິຍາມ

ຄືການເວົ້າກັບກຸ່ມຄົນ, ສອນເລື່ອງພຣະເຈົ້າໃຫ້ພວກເຂົາແລະຊັກຊວນໃຫ້ພວກເຂົາເຊື່ອຟັງພຣະອົງ.

- ຫລາຍເທື່ອການເທດສະຫນາເຮັດໂດຍບຸກຄົນ. ຄົນດຽວເຮັດໃຫ້ຄົນກຸ່ມໃຫຍ່ໂດຍປົກກະຕິເປັນການເວົ້າ, ບໍ່ແມ່ນການຂຽນ.
- '' ການເທດສະຫນາ '' ແລະ ''ການສອນ'' ນັ້ນຄ້າຍຄືກັນ,ແຕ່ບໍ່ໄດ້ຄືກັນເລີຍ.
- ການເທດສະຫນາ ''ອ້າງເຖິງການປະກາດທາງຝ່າຍວິນຍານ ຫລື
  ຄໍາສອນແຕ່ງຄວາມຈິງຕໍ່ສາທາລະນະຊົນ,ແລະຊັກຊວນໃຫ້ຜູ້ຟັງຕອບສະໜອງ. ''ການສອນ'' ເປັນຄໍາທີ່ເນັ້ນການສອນ,
  ທີ່ໃຫ້ຂໍ້ມູນແກ່ປະຊາຊົນ ຫລື ສອນພວກເຂົາເຖິງວິທີການເຮັດບາງສິ່ງບາງຢ່າງ.
- ຄໍາວ່າ ''ເທດສະຫນາ'' ມັກຈະໃຊ້ກັບຄໍາວ່າ ''ຂ່າວປະເສີດ.''
- ສິ່ງທີ່ບຸກຄົນໜຶ່ງໄດ້ເທດສະຫນາໃຫ້ກັບຄົນອື່ນກໍສາມາດອ້າງເຖິງໂດຍຫົວໄປໄດ້ວ່າເປັນ ''ຄໍາສອນ'' ຂອງເຂົາ.

## ເທລາ

### ຂ້ເທັດຈິງ

ເທລາເປັນເຊື້ອສາຍຂອງເຊມລູກຊາຍຂອງໂນອາ, ລາວເປັນບິດາຂອງອັບຣາມ, ນາໂຮແລະຮາຣານ.

- ເທລາໄດ້ອອກຈາກບ້ານຂອງລາວໃນເມືອງເອີ ເພື່ອທີ່ຈະໄປແຜ່ນດິນການາອານກັບລູກຊາຍຂອງລາວ,
  ແລະໂລດຫລານຊາຍຂອງລາວແລະຊາຣາເມຍຂອງອັບຣາມ.
- ໃນລະຫວ່າງທາງໄປການາອານເທລາແລະຄອບຄົວຂອງລາວໄດ້ອາໄສຢູ່ຫລາຍປີໃນເມືອງຮາລານໃນເມໂສໂປເຕເມຍ.
  ເທລາເສຍຊີວິດໃນເມືອງຮາລານເມື່ອອາຍຸ205ປີ.

## ເທສະການ

### ນິຍາມ

ໂດຍຫົວໄປເທສະການຄືການສະເຫຼີມສະຫຼອງທີ່ຈັດໂດຍຄົນໃນຊຸມຊົນ.

- ຄໍາວ່າ "ເທສະການ" ໃນພັນທະສັນຍາເດີມໝາຍຄວາມຕາມຕົວອັກສອນຄື "ເວລາທີ່ໄດ້ກໍານົດໄວ້".
- ການສະເຫຼີມສະຫຼອງເທດສະການໂດຍຄົນອິສະຣາເອນມີການກໍານົດເວລາຫຼືລະດູການຕາມທີ່ພຣະເຈົ້າຊົງໄດ້ບັນຊາໃຫ້ພວກເຂົາທໍາ.
- ໃນພາສາອັງກິດບາງສະບັບຄໍາວ່າ "ງານລ້ຽງ" ຖືກໃຊ້ຫຼາຍຄັ້ງແທນຄໍາວ່າເທດສະການເພາະວ່າການສະເຫຼີມສະຫຼອງ
  ລວມທັ້ງການຮັບປະທານອາຫານຄາບໃຫຍ່ຮ່ວມກັນ.


generated on Thu Jul 10 08:45:04 2025

- ມີງານເທດສະການຫຼັກໆ ທີ່ຄົນອິສະຣາເອນສະຫຼອງທຸກປີເຊັ່ນ:
- ປັດສະຄາ.
- ເທສະການເຂົ້າໜົມປັ້ງບໍ່ມີເຊື້ອ.
- ຜົນລະປູກທຳອິດ.
- ເທສະການແຫ່ງສັບປະດາ(ເພັນເທຄ້ອດ).
- ເທສະການສຽງແກ.
- ວັນລຶບລ້າງບາບ.
- ເທສະການຢູ່ໄຟ.
- ຈຸດປະສົງຂອງເທດສະການເຫຼົ່ານີ້ຄືການຂອບພຣະຄຸນພຣະເຈົ້າແລະລະນຶກເຖິງສິ່ງມະຫັດສະຈັນທັງຫຼາຍທີ່ພຣະອົງຊົງໄດ້ທຳເພື່ອຊ່ວຍເຫຼືອປົກປ້ອງແລະ

## ເທສະໂລນິກກາ, ຊ່າວເທສະໂລນິກກາ

### ຂໍ້ເທັດຈິງ

ໃນຍຸດຂອງພຣະຄຳພີໃໝ່, ເທສະໂລນິກກາເປັນເມືອງຫລວງຂອງມາຊີໂດເນຍໃນອານາຈັກໂຣມບູຮານ. ປະຊາຊົນທີ່ອາໃສ່ໃນເມືອງນັ້ນເອີ້ນວ່າ "ຊາວເທສະໂລນິກກາ".

- ເມືອງເທຊະໂລນິກາເປັນທ່າເຮືອທີ່ສຳຄັນແລະຍັງຕັ້ງຢູ່ແຄມຖະໜົນໃຫຍ່ທີ່ເຊື່ອມຕໍ່ເມືອງໂຣມກັບພາກຕາເວັນອອກຂອງອານາຈັກໂລມັນ.
- ໂປໂລພ້ອມດ້ວຍສີລາແລະຕີໂມທຽວໄດ້ໄປຢ້ຽມຢາມເທສະໂລນິກາໃນການເດີນທາງໄປປະກາດຂ່າວປະເສີດຄັ້ງທີ່ສອງແລະດ້ວຍເຫດນັ້ນ, ໂບດແຫ່ງໜຶ່ງໄດ້ຖືກສ້າງຕັ້ງຂຶ້ນຢູ່ທີ່ນັ້ນ.
  ຕໍ່ມາໂປໂລຍັງໄດ້ໄປຢ້ຽມຢາມເມືອງນີ້ໃນການເດີນທາງໄປປະກາດຂ່າວປະເສີດເປັນເທື່ອທີ່ສາມ.
- ໂປໂລຂຽນຈົດໝາຍສອງສະບັບເຖິງຄລິດສະຕຽນໃນເມືອງເທຊະໂລນິກາ. ຈົດໝາຍເຫລົ່ານີ້ (1 ເທຊະໂລນິກາແລະ 2 ເທຊະໂລນິກາ) ແມ່ນລວມຢູ່ໃນພຣະຄຳພີໃໝ່.

## ເນບູກາດເນັດຊາ

### ຂໍ້ເທັດຈິງ

ເນບູກາດເນັດຊາເປັນກະສັດອົງໜຶ່ງຂອງອານາຈັກບາບີໂລນ ເຊິ່ງເປັນກອງທັບທີ່
ເຕັມດ້ວຍກຳລັງອຳນາດຂອງເຂົາໄດ້ຊະນະເໜືອຊົນຫຼາຍກຸ່ມແລະຫຼາຍປະເທດ.

- ພາຍໃຕ້ການນຳຂອງເນບູກາດເນັດຊາ
  ກອງທັບບາບີໂລນໄດ້ໂຈມຕີແລະມີໄຊຊະນະເໜືອອານາຈັກຢູດາແລະໄດ້ນຳປະຊາຊົນສ່ວນໃຫຍ່ຂອງຢູດາໄປເປັນຊະເລີຍໃນບາບີໂລນໃນຖານະຊະເລີຍ. "ການຕົກເປັນຊະເລີຍທີ່ບາບີໂລນ"ນັ້ນເຖິງ 70 ປີ .
- ໜຶ່ງໃນຊະເລີຍທີ່ຖືກຈັບໄປຄື ດານີເອນ ໄດ້ທຳນວາຍຝັນຂອງກະສັດເນບູກາດເນັດຊາ.
- ຊະເລີຍຊາວອິດສະຣາເອນອີກສາມ ຄື ຮານັນຢາ ມີຊາເອນແລະອາຊາຣີຢາ ໄດ້ໄດ້ຖືກໂຍນລົງໄປໃນເຕົາໄຟ
  ເພາະເຂົາທັ້ງສາມປະຕິເສດທີ່ຈະຂາບໄຫວ້ຮູບເຄົາລົບທີ່ກະສັດເນບູກາດເນັດຊາສ້າງຂຶ້ນ.
- ກະສັດເນບູກາດເນັດຊາອວດຕົວຈອງຫອງແລະຂາບໄຫວ້ພະຫຽມ ເມື່ອພະອົງຮົບຊະນະອານາຈັກຢູດາ.
  ພະອົງໄດ້ລັກເອົາເຄື່ອງເງິນແລະຫອງມາຈາກພຣະວິຫານ ເຊິ່ງຕັ້ງຢູ່ໃນນະຄອນເຢຣູຊາເລັ່ມ.
- ເພາະກະສັດເນບູກາດເນັດຊາອວດຕົວຈອງຫອງແລະປະຕິເສດທີ່ຈະບໍ່ຫັນກັບຈາກການນະມັດສະການພຣະຫຽມ
  ພຣະຢາເວຈຶ່ງໃຫ້ພຣະອົງຂາດສະຕິ
- ຍ້ອນວ່າເນບູກາດເນັດຊາມີຄວາມພາກພູມໃຈແລະປະຕິເສດທີ່ຈະຫັນໜີ ຈາກການນະມັດສະການພະຢອມ,
  ພຣະເຢໂຫວາເຮັດໃຫ້ລາວຕົກຢູ່ໃນສະ ພາບທີ່ຂັດສົນເປັນເວລາເຈັດປີ, ດຳລົງຊີວິດຄືກັບສັດ. ຫລັງຈາກເຈັດປີ,
  ພຣະເຈົ້າໄດ້ຟື້ນຟູເນບູກາດເນັດຊາໃນເວລາທີ່ລາວຖ່ອມຕົວລົງແລະ

ຍ້ອງຍໍພະເຈົ້າຫ່ຽງແທ້ອົງດຽວ.

## ເນລະເທດ, ຜູ້ຖືກເນລະເທດ

### ນິຍາມ

ຄຳວ່າ "ເນລະເທດ" ອ້າງເຖິງຄົນທີ່ຖືກບັງຄັບໃຫ້ໄປອາໃສຢູ່ໃນບ່ອນຫ່າງໄກຈາກບ້ານເກີດເມືອງນອນຂອງພວກເຂົາ.

- ໂດຍປົກກະຕິແລ້ວມະນຸດຖືກເນລະເທດໄປເພາະເປັນການລົງໂທດຫລືເຫດຜົນທາງດ້ານການເມືອງ.
- ຄົນທີ່ຖືກເສຍໄຊ ອາດຈະຖືກເນລະເທດໄປຍັງປະເທດຂອງກອງທັບທີ່ມີໄຊຊະນະ, ເພື່ອເຮັດວຽກງານໃຫ້ພວກເຂົາ.


generated on Thu Jul 10 08:45:04 2025

- "ຊະເລີຍບາລີໂລນ" (ຫລື "ຜູ້ຖືກເນລະເທດ") ເປັນຊ່ວງໜຶ່ງໃນປະຫວັດສາດພຣະຄຳພີ ເມື່ອຄົນຢິວຈຳນວນຫລາຍທີ່ມາຈາກເຂດເວງຢູດາ ຖືກກວາດຕ້ອນໄປຈາກບ້ານເມືອງຂອງພວກເຂົາ ແລະຖືກບັງຄັບໃຫ້ອາໄສຢູ່ໃນນະຄອນບາບີໂລນ. ເປັນເວລານານເຖິງ 70 ປີ.
- ຖ້ອຍຄຳທີ່ວ່າ "ຜູ້ຖືກເນລະເທດ" ອ້າງເຖິງປະຊາຊົນທີ່ມີຊີວິດຢູ່ຢ່າງຜູ້ຖືກເນລະເທດ, ຈາກບ້ານເມືອງຂອງພວກເຂົາ.

### ຄຳແນະນຳໃນການແປ

- ຄຳວ່າ "ເນລະເທດ" ນີ ສາມາດແປໄດ້ອີກວ່າ, "ຖືກສົ່ງອອກໄປ" ຫລື "ຖືກບັງຄັບໃຫ້ອອກ" ຫລື "ຖືກຂັບໄລ່."
- ຄຳວ່າ "ຜູ້ຖືກເນລະເທດ" ນີ ສາມາດແປໄດ້ອີກດ້ວຍຄຳຫລືຖ້ອຍຄຳທີ່ມີຄວາມໝາຍວ່າ, "ເວລາຂອງການສົ່ງໄປ" ຫລື "ຊ່ວງເວລາທີ່ຖືກເນລະເທດ" ຫລື "ຊ່ວງເວລາທີ່ຖືກບັງຄັບບໍ່ໃຫ້ມີຕົວຕົນ" ຫລື "ຖືກເນລະເທດ."
- ວິທີອື່ນໆໃນການແປຄຳວ່າ "ຜູ້ຖືກເນລະເທດ" ຄວນລວມກັບຄຳວ່າ, "ຄົນທີ່ຖືກເນລະເທດ" ຫລື "ຄົນທີ່ໄດ້ຖືກເນລະເທດ" ຫລື "ຄົນທີ່ຖືກເນລະເທດໄປນະຄອນບາບີໂລນ."

## ເນື້ອໜັງ

### ນິຍາມ

ໃນພຣະຄຳພີຄຳວ່າ "ເນື້ອໜັງ" ຕາມຕົວອັກສອນກ່າວເຖິງສິ່ງທີ່ນຸ້ມນວນຫາງກາຍຍະພາບຂອງຮ່າງກາຍຂອງມະນຸດຫຼືສັດ.

- ພຣະຄຳພີໃຊ້ຄຳວ່າ "ເນື້ອໜັງ" ໃນຮູບແບບປຽບທຽບທີ່ກ່າວເຖິງມະນຸດທຸກຄົນ ຫຼືສິ່ງມີຊີວິດທຸກຢ່າງ.
- ໃນພັນທະສັນຍາໃໝ່ຄຳວ່າ "ເນື້ອໜັງ" ໃຊ້ເພື່ອອ້າງເຖິງຄວາມບາບຊຶ່ງເປັນທຳມະຊາດຂອງມະນຸດ. ຄຳນີ້ມັກໃຊ້ໃນລັກສະນະທີ່ແຕກຕ່າງກັບທຳມະຊາດຝ່າຍວິນຍານຂອງພວກເຂົາ.
- ສ່ວນສຳນວນຄຳວ່າ, "ເນື້ອແລະເລືອດຂອງຕົນ" ອ້າງເຖິງທີ່ບາງຄົນກ່ຽວຂ້ອງກັບອີກຄົນໂດຍທາງສາຍເລືອດ,ຕົວຢ່າງເຊັ່ນ ພໍ່ແມ່, ຍາດ,ບຸດຫຼານ.
- ສ່ວນສຳນວນຄຳວ່າ "ເນື້ອແລະເລືອດ" ສາມາດໝາຍເຖິງບັນພະບຸຣຸດຫຼືລູກຫຼານຂອງຄົນນັ້ນ.
- ການສະແດງອອກຂອງຄຳວ່າ "ເນື້ອດຽວກັນ" ກ່າວເຖິງການເປັນໜຶ່ງດຽວທາງກາຍະພາບຂອງຜູ້ຊາຍແລະຜູ້ຍິງໃນການແຕ່ງງານ.

### ຄຳແນະນຳການແປ

- ໃນບໍຣິບົດຂອງຮ່າງກາຍສັດ, "ເນື້ອໜັງ" ສາມາດແປໄດ້ອີກວ່າ "ຮ່າງກາຍ" ຫຼື "ໜັງ" ຫຼື "ເນື້ອ".
- ເມື່ອຄຳນີ້ຖືກໃຊ້ກ່າວເຖິງມະນຸດທັງໝົດ, ຄຳນີ້ສາມາດແປໄດ້ອີກວ່າ "ປະຊາຊົນ" ຫຼື "ມະນຸດ" ຫຼື "ທຸກຄົນທີ່ມີຊີວິດ".
- ເມື່ອເອີ້ຍເຖິງມະນຸດທຸກຄົນທົ່ວໄປ, ຄຳນີ້ສາມາດແປໄດ້ອີກວ່າ "ຄົນ" ຫຼື "ມະນຸດ" ຫຼື "ທຸກຄົນທີ່ມີຊີວິດ".
- ສຳນວນ, "ເນື້ອແລະເລືອດ" ສາມາດແປໄດ້ອີກວ່າ "ຍາດ" ຫຼື "ຄອບຄົວຫຼື "ຍາດພີ່ນ້ອງ" ຫຼື "ຕະກູນຄອບຄົວ," ແລະຍັງມີອີກຫຼາຍຂໍ້ທີ່ສາມາດແປດ້ວຍຄຳວ່າ "ບັນພະບຸຣຸດ" ຫຼື "ບັນດາເຊື້ອສາຍ".
- ໃນບາງພາສາອາດຈະມີຄຳທີ່ສະແດງອອກໃນຄວາມໝາຍດຽວກັນກັບ "ເນື້ອແລະເລືອດ".
- ຄຳເວົ້າທີ່ສະແດງວ່າ, "ກາຍເປັນເນື້ອດຽວ" ສາມາດແປໄດ້ອີກວ່າ, "ຮ່ວມທາງເພດ" ຫຼື "ກາຍເປັນກາຍດຽວກັນ" ຫຼື "ກາຍເປັນເໝືອນບຸກຄົນດຽວໃນທາງຮ່າງກາຍແລະວິນຍານ." ການແປຂໍ້ຄວາມນີ້ຄວນກວດສອບໃຫ້ແນ່ໃຈວ່າເປັນສິ່ງທີ່ຍອມຮັບໃນພາສາທີ່ແປແລະວັດທະນະທັມ.

## ເນເກບ

### ຂໍ້ເທັດຈິງ

ເນເກບເປັນດິນແດນທະເລຊາຍທາງຕອນໃຕ້ຂອງອິດສະຣາເອນ ທາງຕາເວັນຕົກສຽງໃຕ້ຂອງທະເລເກືອ.

- ຄຳຄັ່ງກ່າວເອີ່ນວ່າ ''ທິດໃຕ້'' ພຣະຄຳພີພາສາອັງກິດບາງສະບັບແປວ່າເນເກບວ່າທິດໃຕ້.
- ອາດຈະເປັນໄປໄດ້ວ່າສະຖານທີ່ທາງຕອນໃຕ້ທີ່ເນເກບເຄີຍຕັ້ງຢູ່ນັ້ນ ເປັນຄົນລະທີ່ກັບທະເລຊາຍເນເກບໃນປັດຈຸບັນ.
- ເມື່ອອັບຣາຮາມໄດ້ອາໄສຢູ່ທີ່ເມືອງເຄເດັດນັ້ນ ເຂົ້າຢູ່ທີ່ເນເກບຫລືແຄ້ນທາງຕອນໃຕ້.
- ອີຊາກອາໄສຢູ່ໃນເມືອງເນເກບເມື່ອເຣເບກາ ໄດ້ເດີນທາງມາພົບເຂົາ ແລະໄດ້ກາຍມາເປັນເມຍຂອງເຂົາ.
- ຊົນເຜົ່າຢິວຂອງຢູດາແລະຊີເມໂອນໄດ້ອາໄສຢູ່ທີ່ແຄ້ນທາງຕອນໃຕ້ນີ.
- ເມືອງທີ່ໃຫຍ່ທີ່ສຸດໃນແຄວ້ນເນເກບຄືເມືອງເບ ເອນເຊບາ.


generated on Thu Jul 10 08:45:04 2025

## ເນເຫມີຢາ

### ຂໍ້ເທັດຈິງ

ເນເຫມີຢາ ຄືຊາວອິດສະຣາເອນທີ່ອາໄສຢູ່ໃນບາບີໂລນເມື່ອຄາວທີ່ຊາວອິດສະຣາເອນແລະຢູດາຖືກຈັບໄປເປັນຊະເລີຍໂດຍຊາວບາບີໂລນ.

- ຂະນະທີ່ເນເຫມີຢາເປັນພະນັກງານຖືຈອກເຫຼົ້າສໍາລັບກະສັດເປີເຊຍມີຊື່ວ່າ ອາກຕາເຊເຊັດນັ້ນ
  ເນເຫມີຢາໄດ້ຂໍອະນຸຍາດກະສັດກັບໄປນະຄອນເຢຣູຊາເລັ້ມ.
- ເນເຫມີຢາໄດ້ນໍາພາຊາວອິດສະຣາເອນກໍ່ສ້າງກໍາແພງນະຄອນເຢຣູຊາເລັ້ມເຊິ່ງຊາວບາບີໂລນໄດ້ທໍາລາຍນັ້ນຂຶ້ນໃໝ່.
- ເປັນເວລາເຖິງ 12 ປີ ທີ່ເນເຫມີຢາເປັນຜູ້ປົກຄອງນະຄອນເຢຣູຊາເລັ້ມ ກ່ອນທີ່ຈະກັບໄປຍັງພຣະຣາຊະວັງຂອງກະສັດ.
- ພັນທະສັນຍາເດີມໃນພຣະທໍາເນເຫມີຢານັ້ນ
  ໄດ້ເລົ່າເລື່ອງລາວການງານຂອງເນເຫມີຢາໃນການກໍ່ສ້າງກໍາແພງເມືອງຂຶ້ນໃໝ່ແລະການປົກຄອງຂອງທ່ານເໜືອປະຊາຊົນໃນນະຄອນເຢຣູຊາເລັ້ມ.
- ຍັງມີຊື່ເນເຫມີຢາຄົນອື່ນໆໃນພັນທະສັນຍາເດີມອີກດ້ວຍ
  ໂດຍປົກກະຕິຊື່ຂອງພໍ່ຈະຕໍ່ທ້າຍເພື່ອໃຫ້ເຫັນຄວາມແຕກຕ່າງວ່າເວົ້າເຖິງເນເຫມີຢາຄົນໃດ.

## ເບຍເອເຊບາ

### ຂໍ້ເທັດຈິງ

ໃນສະ ໄໝພຣະຄໍາພີເດີມ, ເມືອງບັດຊາບາແມ່ນເມືອງໜຶ່ງທີ່ຕັ້ງຢູ່ທາງທິດຕາເວັນຕົກສຽງໃຕ້ຂອງນະຄອນເຢຣູຊາເລັ້ມປະມານ 45 ໄມໃນເຂດທະເລຊາຍເຊິ່ງປະຈຸບັນຖືກເອີ້ນວ່າເມືອງນີເວດ.

- ທະເລຊາຍທີ່ຢູ່ອ້ອມຮອບເມືອງ ເບເລເຊບູນ ແມ່ນເຂດຖິ້ມແຫ້ງແລ້ງກັນດານບ່ອນທີ ອາຮາກ ແລະ ອີສະມາເອັນ
  ຫລົງທາງຫລັງຈາກອັບຣາຮາມໄດ້ສົ່ງພວກເຂົາອອກໄປຈາກເຕັ້ນຂອງລາວ.
- ຊື່ຂອງນະຄອນນີ້ຫມາຍຄວາມວ່າ "ບໍ່ນ້ໍາຂອງຄໍາສາບານ."
  ໄດ້ມີການຕັ້ງຊື່ນີ້ເມື່ອອັບຣາຮາມໄດ້ສາບານວ່າຈະບໍ່ລົງໂທດຜູ້ຊາຍຂອງກະສັດ ອາບີເມເຫລັກ ເພາະໄດ້ຍຶດຄອງນ້ ໍາສ້ໍາງແຫ່ງໜຶ່ງ
  ຂອງອັບຣາຮາມ.

## ເບຣູເອັນ

### ຂໍ້ເທັດຈິງ

ເບຣູເອັນ ແມ່ນລູກຊາຍຂອງ ນາໂຫອ້ໍາຍຂອງອັບຣາຮາມ.

- ເບຣູເອັນ ເປັນພໍ່ຂອງເລເບກາແລະ ລາບານ.
- ນອກນັ້ນຍັງມີເມືອງໜຶ່ງ ຊື່ວ່າເມືອງເບຣູເອັນ, ເຊິ່ງອາດຈະຕັ້ງຢູ່ທາງພາກໃຕ້ຂອງຢູດາ, ເຊິ່ງບໍ່ໄກຈາກເມືອງ ເບັດຣີເຊບາ.

## ເບັດ ເຊເມດ

### ຂໍ້ເທັດຈິງ

ເມືອງເບັດເຊເມດແມ່ນຊື່ຂອງເມືອງການາອານປະມານ 30 ກິໂລແມັດທາງທິດຕາເວັນຕົກຂອງເມືອງເຢຣູຊາເລັ້ມ.

- ຊາວອິດສະລາແອນໄດ້ຍຶດເອົາເມືອງເບັດເຊເມດໃນຊ່ວງເວລາຂອງການນໍາຂອງໂຢຊວຍ.
- ເມືອງເບັດເຊເມດເປັນເມືອງໜຶ່ງທີ່ຖືກຈັດໃຫ້ເປັນບ່ອນສໍາ ລັບພວກປະໂລຫິດຊາວເລວີທີ່ອາໄສຢູ່.
- ເມື່ອພວກຟີລິດສະຕິນພວມຈັບເອົາຫີບແຫ່ງຄໍາສັນຍາທີ່ຖືກຈັບກັບໄປເມືອງເຢຣູຊາເລັ້ມ, ເມືອງເບດເຊເມດແມ່ນເມືອງທໍາ
  ອິດທີ່ພວກເຂົາຢຸດຢູ່ກັບມັນ.

## ເບັດທານີ

### ຂໍ້ເທັດຈິງ

ເມືອງເບັດທານີຕັ້ງຢູ່ຖານທີ່ຕັ້ງຂອງເປັນພູທາງທິດຕາເວັນອອກຂອງພູເຂົາຕົ້ນຫມາກກອກ, ຫ່າງຈາກເມືອງເຢຣູຊາເລັ້ມປະມານ 2 ໄມ,

- ບ້ານເບັດທານີໃກ້ກັບຖະໜົນທີ່ແລ່ນຂ້າມເມືອງເຢຣູຊາເລມແລະເມືອງ ເຢຣິໂກ.


generated on Thu Jul 10 08:45:04 2025

- ພຣະເຢຊູມັກຈະໄປຢາມບ້ານເບັດທານີ່ຍ້ອນທີ່ເພື່ອນສະໜິດ ຂອງລາວຊື່ລາຊະໂລ, ມາທາ ແລະ ມາລີອາໃສຢູ່.
- ເບັດທານີ ແມ່ນເປັນທີ່ຮູ້ຈັກໂດຍສະເພາະແມ່ນສະຖານທີ ທີ່ພຣະເຢຊູ ປຸກລາຊະໂລໃຫ້ຄືນມາຈາກຕາຍ.

## ເບັດເອັນ

### ຂໍ້ເທັດຈິງ

ເບັດເອັນ ແມ່ນເມືອງຕັ້ງຢູ່ທາງທິດເໜືອຂອງເຢຣູຊາເລັມໃນແຜ່ນດິນການາອານ. ໃນເມືອກ່ອນມັນຖືກເອີ້ນວ່າ "ລູຣ."

- ຫລັງຈາກໄດ້ຮັບຄຳສັນຍາຂອງພຣະເຈົ້າເປັນເທື່ອທຳອິດ, ອັບຣາມ (ອັບຣາຮາມ) ໄດ້ສ້າງແທ່ນບູຊາຕໍ່ພຣະເຈົ້າໃກ້ ເບັດເອັນ. ຊື່ຕົວຈິງຂອງເມືອງຍັງບໍ່ທັນມີຊື່ວ່າເບັດເອັນໃນເວລານັ້ນ, ແຕ່ຕາມປົກກະຕິແລ້ວມັນຖືກເອີ້ນວ່າ "ເບັດເອັນ" ເຊິ່ງເປັນທີ່ຮູ້ຈັກກັນດີກວ່າ.
- ເມື່ອໝີຈາກເອຊາວອ້າຍຂອງລາວ, ຢາໂຄບໄດ້ພັກຢູ່ກາງຄືນໃນເມືອງນີ້ແລະນອນຢູ່ກາງແຈ້ງໃນພຶ້ນທີ່ນັ້ນ. ໃນຂະນະທີ່ລາວ ກຳລັງນອນຢູ່, ລາວມີຄວາມຝັນທີ່ໄດ້ສະແດງໃຫ້ຫູດສະຫວັນຂຶ້ນແລະລົງຂັ້ນໄດໄປສະຫວັນ.
- ເມືອງນີ້ບໍ່ມີຊື່ວ່າ "ເບັດເອັນ" ຈົນກ່ວາຫລັງຈາກຢາໂຄບຕັ້ງຊື່ນັ້ນ. ເພື່ອເຮັດໃຫ້ສິ່ງທີ່ຈະແຈ້ງກວ່ານີ້, ການແປບາງພາສາອາດຈະແປວ່າ "ລູຣ (ຕໍ່ມາເອີ້ນວ່າ ເບັດເອັນ)" ໃນຂໍ້ຄວາມກ່ຽວກັບອັບຣາຮາມ, ເຊັ່ນດຽວກັນກັບເວລາທີ່ຢາໂຄບມາຮອດບ່ອນນັ້ນ (ກ່ອນທີ່ລາວຈະປ່ຽນຊື່).
- ເບັດເອັນ ໄດ້ຖືກກ່າວເຖິງເລື້ອຍໆໃນສະໄໝພຣະຄຳພີເດີມ ແລະ ເປັນສະຖານທີ ທີ່ມີເຫດການສຳຄັນຫຼາຍຢ່າງເກີດຂຶ້ນ.

## ເບັນຢາມິນ

### ຂໍ້ເທັດຈິງ

ເບັນຢາມິນ ແມ່ນລູກຊາຍຫລ້າທີ່ເກີດກັບຍາໂຄບ ແລະ ເມຍຂອງນາງລາເຊນ. ຊື່ຂອງລາວຫມາຍຄວາມວ່າ, "ລູກຊາຍຂອງມືຂວາຂອງຂ້ອຍ."

- ລາວ ແລະ ນ້ອງຊາຍຂອງລາວ ຊື່ໂຢເຊັບ ເປັນລູກຄົນດຽວຂອງລາເຊນ ເຊິ່ງໄດ້ເສຍຊີວິດຫລັງຈາກເບັນຢາມິນເກີດ.
- ເຊື້ອສາຍຂອງເບັນຢາມິນ ກາຍ ເປັນໜຶ່ງໃນ ສິບສອງ ເຜົ່າ ຂອງ ອິດສະຣາເອນ.
- ກະສັດ ຊາອູ ແມ່ນ ມາ ຈາກ ຊົນ ເຜົ່າ ອິດ ສະ ລາ ເອນ.
- ອັກ ຄະ ສາ ວິ ກ ໂປ ໂລ ແມ່ນ ມາ ຈາກ ຊົນ ເຜົ່າ ເບັນ ຢາ ມິນ.

## ເບີເຣຍ

### ຂໍ້ເທັດຈິງ

ໃນ ສະ ໄໝ ພຣະ ຄຳ ພີ ໃໝ່, ເມືອງ ເບ ໂລ (ຫລື Beroea)
ແມ່ນ ເມືອງ ກຣີກ ທີ່ ຈະ ເລີນ ຮຸ່ງ ເຮືອງ ທາງ ພາກ ຕາ ເວັນ ອອກ ສ ຽງ ໃຕ້ ຂອງ ປະ ເທດ ມາ ເຊ ໂດ ນີ, ປະ ມານ 80
ກິ ໂລ ແມັດ ທາງ ໃຕ້ ຂອງ ເມືອງ ເທ ຊະ ໂລ ນີ ກ.

- ໂປ ໂລ ແລະ ຊີ ລາ ໄດ້ ໜີ
  ໄປ ເມືອງ ເບ ລາ ອາ ຫລັງ ຈາກ ເພື່ອນ ຄຣິ ດ ສະ ຕຽນ ໄດ້ ຊ່ວຍ ພວກ ເຂົາ ໜີ ຈາກ ຊາວ ຢິວ ບາງ ຄົນ ທີ່ ໄດ້ ສ້າງ ຄວາມ ເດືອດ ຮ້ອນ ໃຫ້ ພວກ ເຂົາ ໃນ ເມືອງ ເທ ຊະ ໂລ ນີ ກ.
- ເມື່ອ ປະ ຊາ ຊົນ ທີ່ ອາ ໄສ ຢູ່ ເມືອງ ເບ ເລ ອາ ໄດ້ ຍິນ ໂປ ໂລ ປະ ກາດ,
  ພວກ ເຂົາ ໄດ້ ຄົ້ນ ຄວ້າ ພຣະ ຄຳ ພີ ເພື່ອ ຢືນ ຢັນ ວ່າ ສິ່ງ ທີ່ ລາວ ກຳ ລັງ ບອກ ພວກ ເຂົາ ແມ່ນ ຄວາມ ຈິງ.

## ເບື້ອງເທິງ, ໃນທີ່ສູງສຸດ

### ນິຍາມ

ຄຳ ວ່າ "ເບື້ອງ ເທິງ" ຫລື "ໃນ ທີ່ ສູງ ສຸດ" ເປັນ ຄຳ ກ່າວ ຊຶ່ງ ໂດຍ ທົ່ວ ໄປ ໝາຍ ຄວາມ ວ່າ, "ໃນ ສະ ຫວັນ."

- ອີກ ຄວາມ ຫມາຍ ໜຶ່ງ ຂອງ ຄຳ ກ່າວ ວ່າ "ໃນ ທີ່ ສູງ ສຸດ" ນັ້ນ

ຫມາຍ ເຖິງ, "ໄດ້ ຮັບ ກຽດ ສູງ ສຸດ."

- ຄຳ ກ່າວ ນີ ສາ ມາດ ໃຊ້ ຕາ ມ ຕົວ ອັກ ສອນ, ເຊັ່ນ ໃນ ຄຳ ກ່າວ ວ່າ, "ເທິງ ຕົ້ນ ໄມ້ ທີ່ ສູງ ສຸດ" ເຊິ່ງ ມີ ຄວາມ ຫມາຍ ຕົງ ຕົວ ໝາຍ ຄວາມ ວ່າ "ເທິງ ຕົ້ນ ໄມ້ ທີ່ ສູງ ທີ່ ສຸດ."


generated on Thu Jul 10 08:45:04 2025

- ຄຳວ່າ "ໃນທີ່ສູງ" ສາມາດອ້າງເຖິງ ໃນທີ່ສູງເທິງທ້ອງຟ້າ, ເຊັ່ນ ຮັງນົກຢູ່ໃນທີ່ສູງ. ເຊິ່ງໃນບໍລິບົດນັ້ນ ສາມາດແປວ່າ "ໃນທີ່ສູງເທິງທ້ອງຟ້າ" ຫລື "ເທິງຍອດໄມ້ທີ່ສູງ."
- ຄຳວ່າ "ສູງ" ຊີ້ເຖິງສະຖານທີ ຊຶ່ງຕັ້ງຢູ່ເທິງ ທີ່ສູງຫລືຄວາມສຳຄັນ ຂອງບຸກຄົນຫລືສິ່ງຂອງ.
- ຄຳກ່າວວ່າ "ຈາກເບື້ອງເທິງ" ສາມາດແປໄດ້ວ່າ "ຈາກສະຫວັນ."

## ເຍເລເຊຍນ

### ຂໍ້ເທັດຈິງ

ເຍເລເຊຍນ ແມ່ນຊື່ອື່ນສຳລັບຊາຕານ, ຫລືມານ. ບາງຄັ້ງມັນຍັງຖືກສະກົດ, "ເຍເລເຊຍນ."

- ຊື່ນີ້ມີຄວາມໝາຍວ່າ "ເຈົ້າຂອງແມງວັນ" ເຊິ່ງໝາຍຄວາມວ່າ, "ປີ້ກຄອງຜີປີສາດ."
  ແຕ່ມັນເປັນສິ່ງທີ່ດີທີ່ສຸດທີ່ຈະແປຄຳສັບນີ້ໃກ້ຄຽງກັບການສະກົດເດີມແທນທີ່ຈະແປຄວາມໝາຍ.
- ມັນຍັງສາມາດຖືກແປເປັ້ນ "ວີນຍານຊົ່ວ, ເຍເລເຊຍນ" ເພື່ອເຮັດໃຫ້ມັນຊັດເຈນວ່າຜູ້ທີ່ຖືກກ່າວເຖິງ.
- ຊື່ນີ້ແມ່ນກ່ຽວຂ້ອງກັບຊື່ຂອງພະຫງົມເຈົ້າທີ່ບໍ່ຖືກຕ້ອງ "ບາລ-ເຊຍນ" ຂອງ ເອໂຄຣ.

## ເຍໄນຍາ

### ຂໍ້ເທັດຈິງ

ເຍໄນຍາ ແມ່ນຊື່ຂອງຜູ້ຊາຍຫລາຍຄົນໃນພຣະສັນຍາເດີມ.

- ເຍໄນຍາລູກຊາຍຂອງ ເຢໂຮຍາດາ ແມ່ນໜຶ່ງຂອງຜູ້ຊາຍທີ່ຍິ່ງໃຫຍ່ຂອງດາວິດ.
  ລາວເປັ້ນນັກຮົບທີ່ເກ້ັງກ້າແລະໄດ້ຮັບໜ້າທີ່ເປັ້ນຕົວແທນເຝົ້າຍາມຂອງດາວິດ.
- ເມື່ອກະສັດຊາໂລໂມນຖືກແຕ່ງຕັ້ງໃຫ້ເປັ້ນກະສັດ, ເຍໄນຮິຍາໄດ້ຊ່ວຍລາວໂຄ່ນລົ້ມສັດຕູຂອງລາວ.
  ໃນທີ່ສຸດລາວໄດ້ກາຍເປັ້ນຜູ້ບັນຊາການກອງທັບອິດສະລາເອນ.
- ຜູ້ຊາຍຄົນອື່ນໆໃນສະໄໝ່ພຣະຄຳພີເດີມທີ່ມີຊື່ວ່າ ເຍໄນຍາ ປະກອບມີເລວີ 3 ຄົນ: ປະໂລຫິດ, ນັກດົນຕີ, ແລະເຊື້ອສາຍຂອງ ອາຊາກ.

## ເປັ້ນທຳ, ທ່ຽງທຳ, ຍຸດຕິທຳ

### ນິຍາມ

ຄຳເຫລົ່ານີ້ໝາຍເຖິງການປະຕິບັດຕໍ່ຜູ້ຄົນຢ່າງຖືກຕ້ອງຕາມກົດໝາຍຂອງພຣະເຈົ້າ.
ກົດໝາຍຂອງມະນຸດທີ່ສະທ້ອນໃຫ້ເຫັນມາດຕະຖານຂອງພຣະເຈົ້າໃນການປະພຶດທີ່ຖືກຕ້ອງຕໍ່ຄົນອື່ນກໍ່ມີຄວາມຍຸດຕິທຳເຊັ່ນກັນ.

- “ເປັ້ນທຳ“ ແມ່ນການກະທຳທີ່ຖືກຕ້ອງຕໍ່ຄົນອື່ນ.
  ແລະຍັງໝາຍເຖິງຄວາມສັດຊື່ແລະຊື່ສັດທີ່ຈະເຮັດໃນສິ່ງທີ່ຖືກຕ້ອງທາງສິນທຳໃນສາຍຕາຂອງພຣະເຈົ້າ.
- ການກະທຳ “ຍຸດຕິທຳ“ ໝາຍເຖິງການປະຕິບັດຕໍ່ຜູ້ຄົນໃນແບບທີ່ຖືກຕ້ອງ, ດີແລະຖືກຕ້ອງຕາມກົດໝາຍຂອງພຣະເຈົ້າ.
- ການໄດ້ຮັບ “ຄວາມທ່ຽງທຳ“ ໝາຍເຖິງການໄດ້ຮັບການປະຕິບັດຢ່າງຖືກຕ້ອງພາຍໃຕ້ກົດໝາຍ,
  ບໍ່ວ່າຈະຖືກປົກປ້ອງໂດຍກົດໝາຍຫຼືຖືກລົງໂທດຍ້ອນການລະເມີດກົດໝາຍ.
- ບາງເທື່ອຄຳວ່າ “ເປັ້ນທຳ“ ມີຄວາມໝາຍທີ່ກວ້າງຂອງ “ຄົນຊອບທຳ“ ຫຼື “ປະຕິບັດຕາມກົດໝາຍຂອງພຣະເຈົ້າ.“

### ຄຳແນະນຳ ໃນການແປ

- ອີງຕາມສະພາບການ, ວິທີການອື່ນໆທີ່ຈະແປຄຳວ່າ “ເປັ້ນທຳ“ ສາມາດປະກອບມີ, “ຖືກຕ້ອງທາງສິນທຳ“ ຫຼື “ຍຸຕິທຳ.“
- ຄຳວ່າ “ຄວາມທ່ຽງທຳ“ ສາມາດແປໄດ້ວ່າ, “ການປະຕິບັດທີ່ຖືກຕ້ອງ“ ຫຼື “ສິ່ງຄວນໄດ້ຮັບຜົນຢ່າງເໝາະສົມ.“
- ການ “ປະຕິບັດຢ່າງຍຸດຕິທຳ“ ສາມາດແປໄດ້ວ່າ “ປະຕິບັດຢ່າງເປັ້ນທຳ“ ຫຼື “ປະພຶດຕົວໃນທາງທີ່ຖືກຕ້ອງ.“
- ໃນບາງສະພາບການຄຳວ່າ, “ເປັ້ນທຳ“ ສາມາດແປໄດ້ວ່າ “ຊອບທຳ“ ຫຼື "ທ່ຽງແທ້.“


generated on Thu Jul 10 08:45:04 2025

## ເປັນບາງສ່ວນ, ຄວາມລໍາອຽງ

### ນິຍາມ

ຄໍາວ່າ "ເປັນບາງສ່ວນ" ແລະ "ສະແດງຄວາມລໍາອຽງ" ອ້າງເຖິງການເລືອກທີ່ຈະປະຕິບັດຕໍ່ຄົນໜຶ່ງເປັນຄືໜຶ່ງວ່າມີຄວາມສໍາຄັນກວ່າຄົນອື່ນໆ.

- ນີ້ຄືກັບການສະແດງຄວາມຊົ່ມເຊີຍ, ເຊິ່ງໝາຍເຖິງການປະຕິບັດກັບບາງຄົນດີກວ່າປະຕິບັດກັບຄົນອື່ນໆ.
- ໂດຍປົກກະຕິແລ້ວຄວາມລໍາອຽງຫຼືຄວາມຊົ່ມເຊີຍຈະສະແດງຕໍ່ຄົນເພາະວ່າພວກເຂົາຮັ່ງມີກວ່າ ຫຼື ເປັນທີນິຍົມຫຼາຍກວ່າຄົນອື່ນ.
- ພຣະຄໍາພີສອນປະຊາຊົນບໍ່ໃຫ້ສະແດງຄວາມລໍາອຽງຫຼືຄວາມຊື່ນຊົ່ມຕໍ່ປະຊາຊົນຜູ້ຮັ່ງມີຫຼືຜູ້ມີຕໍາແໜ່ງສູງ.
- ໃນຈົດໝາຍທີ່ຂຽນເຖິງຊາວໂຣມນັ້ນ ໂປໂລໄດ້ສອນວ່າພຣະເຈົ້າຊົງຕັດສິນທຸກຄົນດ້ວຍຄວາມທ່ຽງທໍາແລະບໍ່ລໍາອຽງ.
- ພຣະທັມຢາໂກໂບໄດ້ສອນວ່າເປັນການຜິດທີ່ຈະມອບທີ່ນັ່ງທີ່ດີກວ່າຫຼືການປະຕິບັດທີ່ດີກວ່າຕໍ່ຄົນໜຶ່ງເພາະພວກເຂົາຮັ່ງມີ.

## ເປັນມົນທິນ

### ນິຍາມ

ໃນພຣະຄໍາພີ ຄໍາວ່າ " ເປັນມົນທິນ " ໃຊ້ປຽບທຽບໃນການອ້າງເຖິງສິ່ງຕ່າງໆ
ທີ່ພຣະເຈົ້າປະກາດວ່າບໍ່ເໝາະສົມສໍາລັບຄົນຂອງພຣະອົງທີ່ຈະແຕະຕ້ອງ, ກິນ, ຫລືຖວາຍບູຊາ.

- ພຣະເຈົ້າຊົງໃຫ້ຄໍາແນະນໍາແກ່ຊາວອິດສະຣາເອນວ່າສັດໂຕໃດ " ສະອາດ "ແລະສັດໃດ " ເປັນມົນທິນ. "
  ສັດທີ່ເປັນມົນທິນຈະບໍ່ໄດ້ຮັບອະນຸຍາດໃຫ້ນໍາມາຮັບປະທານຫລືຖວາຍບູຊາ.
- ຄົນທີ່ມີໂລກຜິວໜັງບາງຢ່າງຖືກກ່າວວ່າ " ເປັນມົນທິນ " ຈົນກວ່າພວກເຂົາຈະໄດ້ຮັບການຢຽວຢາຈົນຫາຍ.
- ຫາກຊາວອິດສະຣາເອນສໍາພັດສິ່ງທີ່ " ເປັນມົນທິນ, " ພວກເຂົາເອງຈະຖືກພິຈະລາບວ່າເປັນມົນທິນຊົ່ວໄລຍະເວລາໜຶ່ງ.
- ການເຊື່ອຟັງຄໍາສັ່ງຂອງພຣະເຈົ້າກ່ຽວກັບການບໍ່ແຕະຕ້ອງຫລືກິນສິ່ງທີ່ເປັນມົນທິນເຮັດໃຫ້ຊາວອິດສະຣາເອນແຍກໄວ້ເພື່ອຮັບໃຊ້ພຣະເຈົ້າໂດຍສະເພາະ
- ການມີມົນທິນທາງຮ່າງກາຍແລະພິທີການນີ້ເປັນສັນຍາລັກຂອງການມີມົນທິນທາງສິນລະທໍາດ້ວຍ.
- ໃນເຊີງປຽບທຽບອີກຢ່າງໜຶ່ງທີ່ວ່າເປັນ, " ວິນຍານເປື່ອນເປີະ" ໝາຍເຖິງວິນຍານຊົ່ວຮ້າຍ.

### ຄໍາແນະນໍາໃນການແປ

- ຄໍາວ່າ " ເປັນມົນທິນ " ສາມາດແປວ່າ " ບໍ່ສະອາດ " ຫລື " ບໍ່ເໝາະສົມໃນສາຍພຣະເນດຂອງພຣະເຈົ້າ " ຫລື "
  ຮ່າງກາຍບໍ່ສະອາດ " ຫລື " ມົນທິນ. "
- ເມື່ອອ້າງເຖິງຊາຕານວ່າເປັນຜີຖ່ອຍຮ້າຍ, " ເປັນມົນທິນ " ອາດຈະແປວ່າ " ວິນຍານຊົ່ວ " ຫລື " ມົນທິນ. "
- ການແປຄໍານີ້ຈະເຮັດໃຫ້ເກີດຄວາມບໍ່ສະອາດທາງວິນຍານ.
  ມັນຄວນຈະສາມາດອ້າງເຖິງສິ່ງໃດກໍໄດ້ທີ່ພຣະເຈົ້າຊົງປະກາດວ່າບໍ່ເໝາະສໍາລັບການສໍາພັດ, ການກິນ, ຫລືການຖວາຍບູຊາ.

## ເປັນໝັນ

### ນິຍາມ

ການເປັນ“ ໝັນ” ໝາຍຄວາມວ່າບໍ່ໃຫ້ມີຄວາມອຸດົມສົມບູນຫລືເກີດໝາກ.

- ດິນຫລືທີ່ດິນທີ່ແຫ້ງແລ້ງບໍ່ສາມາດຜະລິດພືດພັນໃດໆ.
- ແມ່ຍິງຜູ້ທີ່ເປັນໝັນແມ່ນຜູ້ ໜຶ່ງທີ່ບໍ່ສາມາດຖືພາແລະມີລູກໄດ້.

### ຄໍາແນະນໍາໃນການແປ

- ໃນເວລາທີ່ "ປ່າເຖື່ອນ" ຖືກໃຊ້ໃນການອ້າງອີງເຖິງທີ່ດິນ, ມັນອາດຈະຖືກແປວ່າ "ບໍ່ມີຄວາມອຸດົມສົມບູນ" ຫລື "ບໍ່ມີຜົນດີ" ຫລື
  "ບໍ່ມີພືດ."
- ເມື່ອເວົ້າເຖິງແມ່ຍິງທີ່ບໍ່ມີເຜດສໍາພັນ, ມັນອາດຈະຖືກແປວ່າ "ບໍ່ມີລູກ" ຫລື "ບໍ່ສາມາດທີ່ຈະຮັບລູກໄດ້" ຫລື "ບໍ່ສາມາດຕັ້ງທ້ອງໄດ້".


generated on Thu Jul 10 08:45:04 2025

## ເປໂຕ , ຊີໂມນ ເປໂຕ , ເຄຟັດ

### ຂໍ້ເທັດຈິງ

ເປໂຕ ແມ່ນປະເທດໜຶ່ງທີ່ໄດ້ກາຍມາເປັນອານາຈັກທີ່ຮຸ່ງເຮືອງອຳນາດໂດຍການສະຖາປະນາຂອງໄຊລັດມະຫາລາດ ໃນ 550 ກ່ອນ ຄ.ສ. ປະເທດເປໂຕຕັ້ງຢູ່ທາງທິດຕະເວັນອອກສຽງໃຕ້ຂອງບາບີໂລນແລະອັດຊີເຣຍປະຈຸບັນນີ້ແມ່ນປະເທດອີຫລ່ານ

- ຄົນຂອງປະເທດເປີຊ້ຽນເອີ້ນວ່າ "ຄົນເປໂຕ"
- ພາຍໃຕ້ຄຳປະກາດຂອງກະສັດໄຊລັດ ຊາວຢິວໄດ້ຮັບອິດສະຫລະຈາກການເປັນຊະເລີຍໃນບາບີໂລນ
  ແລະໄດ້ຮັບອະນຸຍາດໃຫ້ກັບໄປທີ່ບ້ານ ແລະໄດ້ມີການສ້າງພຣະວິຫານໃນກຸງເຢລູຊາເລັມຂຶ້ນໃໝ່ດ້ວຍເງິນທຶນຈາກອານາຈັກເປໂຕ
- ກະສັດອານທາເຊີຊີດ
  ຄືຜູ້ຄອງອານາຈັກເປໂຕເມື່ອຜູ້ປະກາດພຣະທຳເອສຣາແລະເນເຫມີຢາໄດ້ກັບໄປທີ່ກຸງເຢລູຊາເລັມເພື່ອສ້າງກຳແພງເມືອງເຢລູຊາເລັມຂຶ້ນໃໝ່
- ເອສເທີໄດ້ກາຍເປັນພະລາຊິນີແຫ່ງອານາຈັກເປໂຕເມື່ອນາງໄດ້ແຕ່ງງານກັບກະສັດອານທາເຊີຊີດ

## ເປົ້າໝາຍ,ຢູ່ໃຕ້ອຳນາດ,ຢູ່ພາຍໃຕ້ການບັງຄັບ

### ນິຍາມ

ຄຳວ່າ "ຢູ່ໃຕ້ການຄວບຄຸມ" ໝາຍເຖິງການຢູ່ໃຕ້ອຳນາດຂອງຜູ້ໃດຜູ້ໜຶ່ງ. ປະໂຫຍກທີ່ວ່າ "ຍອມຢູ່ໃຕ້ອຳນາດ" ແມ່ນຄຳສັ່ງທີ ໝາຍຄວາມວ່າ "ເຊື່ອຟັງ" ຫຼື "ຍອມຈຳນົນຢູ່ໃຕ້ຂອງອຳນາດນັ້ນ".

- ປະໂຫຍກທີ່ວ່າ“ ການຍອມຢູ່ພາຍໃຕ້ການບັງຄັບ” ໝາຍເຖິງການເຮັດໃຫ້ຜູ້ຄົນຢູ່ໃຕ້ອຳນາດຂອງຜູ້ນຳຫລືຜູ້ປົກຄອງ.
- ການ“ ເຮັດໃຫ້ຜູ້ໃດຜູ້ໜຶ່ງຍອມຢູ່ໃຕ້ອຳນາດຕໍ່ສິ່ງໃດສິ່ງໜຶ່ງ” ໝາຍເຖິງການເຮັດໃຫ້ຄົນນັ້ນປະສົບກັບສິ່ງທີ່ບໍ່ດີເຊັ່ນ ການລົງໂທດ.
- ບາງຄັ້ງຄຳວ່າ "ເປົ້າໝາຍ" ຖືກໃຊ້ເພື່ອໝາຍເຖິງຫົວຂໍ້ຫຼືຈຸດປະສົງຂອງບາງສິ່ງບາງຢ່າງເຊັ່ນ
  "ເຈົ້າຈະເປັນເປົ້າໝາຍຂອງການເວົ້າເຍາะເຍີ້ຍ".
- ປະໂຫຍກທີ່ວ່າ "ຢູ່ພາຍໃຕ້ອຳນາດ" ຄືກັນກັບຄຳທີ່ວ່າ "ຈົ່ງຍອມຈຳນົນ" ຫຼື "ຍິນຍອມ".

## ເປໂຕ , ຊີໂມນ ເປໂຕ , ເຄຟັດ

### ຂໍ້ເທັດຈິງ

ເປໂຕແມ່ນຜູ້ໜຶ່ງໃນສາວົກສິບສອງຄົນຂອງພຣະເຢຊູ ທ່ານຄືຜູ້ນຳຄົນສຳຄັນຂອງຄຣິດຕະຈັກໃນຍຸກເລີ່ມຕົ້ນ

- ກ່ອນທີ່ພຣະເຢຊູຈະເອີ້ນໃຫ້ເປໂຕມາເປັນສາວົກນັ້ນ ເປໂຕມີຊື່ວ່າຊີໂມນ
- ພາຍຫຼັງພຣະເຢຊູຈຶ່ງຕັ້ງຊື່ເປໂຕວ່າ "ເຄຟັດ" ຊຶ່ງມີຄວາໝາຍວ່າ "ສິລາ" ຫລື "ກ້ອນຫີນ" ໃນພາສາອາລາມິກ
  ຊື່ເປໂຕນັ້ນກໍມີຄວາມໝາຍວ່າ "ສິລາ" ຫລື "ກ້ອນຫີນ" ໃນພາສາກຣີກດ້ວຍ
- ພຣະເຈົ້າໄດ້ຊົງເຮັດການອັສຈັນຜ່ານເປໂຕໃນການປົ່ນປົວພະຍາດແລະການປະກາດຂ່າວປະເສີດເລື່ອງພຣະເຢຊູ
- ພຣະທຳສອງເຫລ້ມໃນພະຄຳພີພາກພັນທະສັນຍາໃໝ່ຄືຈົດຫມາຍທີ່ເປໂຕໄດ້ຂຽນເພື່ອໜູນໃຈແລະສັ່ງສອນບັນດາຜູ້ເຊື່ອທັ່ງຫຼາຍ

## ເຜົ່າ

### ນິຍາມ

ເຜົ່າເປັນກຸ່ມຄົນທີ່ສືບເຊື້ອສາຍມາຈາກບັນພະບຸລຸດຮ່ວມກັນ

- ຜູ້ຄົນຈາກຊົນເຜົ່າດຽວກັນມັກໃຊ້ພາສາແລະວັດທະນະທຳຮ່ວມກັນ.
- ໃນພັນທະສັນຍາເດີມພຣະເຈົ້າໄດ້ຊົງແບ່ງຊົນຊາດອິດສະຣາເອນອອກເປັນສິບສອງເຜົ່າ.
  ແຕ່ລະເຜົ່າສືບເຊື້ອສາຍມາຈາກບຸດຊາຍຫລືຫລານຊາຍຂອງຢາໂຄບ.
- ເຜົ່າມີຂະໜາດນ້ອຍກວ່າປະເທດ ແຕ່ໃຫຍ່ກວ່າຕະກູນ


generated on Thu Jul 10 08:45:04 2025

## ເຜົ່າ

### ນິຍາມ

ຄຳວ່າ "ເຜົ່າ" ກ່າວເຖິງກຸ່ມສາມາຊິກຄອບຄົວໃຫຍ່ທີ່ມາຈາກບັນພະບຸລຸດດຽວກັນ.

- ໃນພັນທະສັນຍາເດີມ, ຄົນອິດສະຣາເອນຖືກນັບຕາມເຜົ່າ, ຫຼື ກຸ່ມຄອບຄົວຂອງພວກເຂົາ.
- ເຜົ່າເປັນຊື່ທີ່ໃຊ້ເອີ້ນຫົວໄປຕາມບັນພະບຸລຸດເປັນທີ່ຮູ້ຈັກກັນ.
- ບາງຄັ້ງ ຄົນແຕ່ລະຄົນກໍຖືກກ່າວເຖິງໂດຍຊື່ຂອງເຜົ່າຂອງພວກເຂົາ. ຕົວຢ່າງຂອງການເອີ້ນເຊັ່ນນີ້ ຕອນທີເຢຫະໂຣໝໍເຖົ້າຂອງໂມເຊບາງຄັ້ງກໍເອີ້ນວ່າເຣອູເອນ, ຕາມຊື່ເຜົ່າຂອງເຂົາ.
- ເຜົ່າສາມາດແປໄດ້ວ່າ "ກຸ່ມຄອບຄົວ" ຫຼື "ຄອບຄົວໃຫຍ່" ຫຼື "ພວກຍາດພີນ້ອງ.

## ເຝົ້າລະວັງ, ຄົນຍາມ

### ນິຍາມ

ຄຳວ່າ "ເຝົ້າລະວັງ" ໝາຍເຖິງການເບິ່ງບາງສິ່ງບາງຢ່າງໃກ້ສິດແລະຮອບຄອບ ຄຳນີ້ຍັງມີຄວາມໝາຍທີ່ເປັນຮູບຮ່າງຫຼາຍປະການ "ຄົນຍາມ" ຄືບາງຄົນທີ່ເຮັດວຽກຂອງພວກເຂົາຄືການປ້ອງກັນເມືອງໂດຍການດູແລຢ່າງລະມັດລະວັງຕໍ່ອັນຕະລາຍຫຼືການຄຸກຄາມປະຊາຊົນຢູ່ໃນເມືອງ.

- ຄຳສັ່ງໃຫ້ "ເຝົ້າລະວັງຊີວິດແລະຫຼັກຄຳສອນຢ່າງລະມັດລະວັງ" ໝາຍເຖິງຕ້ອງລະມັດລະວັງໃນການດຳເນີນຊີວິດຢ່າງລະວັງແລະບໍ່ເຊື່ອຄຳສອນປອມ.
- ການ "ລະວັງ" ຄືຄຳເຕືອນເພື່ອໃຫ້ລະມັດລະວັງການຫຼີກລ້ຽງອັນຕະລາຍຫຼືອິດທິພົນທີ່ອັນຕະລາຍ.
- ການ "ເຝົ້າລະວັງ" ຫຼື "ຈົ່ງເຝົ້າລະວັງຢູ່" ໝາຍເຖິງການຕຽມພ້ອມສະເໝີແລະປ້ອງກັນຕົວຕໍ່ຄວາມບາບແລະຄວາມຊົ່ວຮ້າຍ ຍັງສາມາດໝາຍເຖິງການ "ຕຽມພ້ອມ" ດ້ວຍເຊັ່ນກັນ.
- ການ "ຄອຍເຝົ້າລະວັງໄວ້" ຫຼື "ຄອຍເຝົ້າລະວັງຢ່າງໃກ້ສິດ" ສາມາດໝາຍເຖິງການປ້ອງກັນແລະ ການປົກປ້ອງຫຼືເບິ່ງແຍງຄົນໃດຄົນໜຶ່ງຫຼືສິ່ງຂອງບາງຢ່າງ.
- ຄຳອື່ນໆ ສຳລັບ "ຄົນຍາມ" ຄື "ທະຫານຍາມ" ຫລື "ຍາມ"

## ເພງສັນລະເສີນ

### ນິຍາມ

ຄຳວ່າ "ສະດຸດີ"ຫລືເພງສັນລະເສີນ ອ້າງເຖິງບົດເພງສັກສິດ ມັກຈະເປັນໃນຮູບແບບຂອງບົດກະວີທີ່ຖືກຂຽນຂຶ້ນມາເພື່ອການຮ້ອງ

- ໃນພັນທະສັນຍາເດີມ ພະທຳເພງສັນລະເສີນໄດ້ລວບລວມເພງເຫຼົ່ານີ້ທີ່ຂຽນຂຶ້ນໂດຍກະສັດດາວິດແລະຊາວອິດສະຣາເອນທັ່ງຫຼາຍ ເຊັ່ນ ໂມເສດ ຊາໂລມອົນ ແລະອາສາບ ທ່ານກາງຄົນອື່ນໆ
- ພະທຳເພງສັນລະເສີນຖືກໃຊ້ໂດຍຊົນຊາດອິດສະຣາເອນໃນການນະມັດສະການພະເຈົ້າຂອງພວກເຂົາ
- ພະທຳເພງສັນລະເສີນສາມາດໃຊ້ເພື່ອສະແດງຄວາມຊື່ນຊົມຍິນດີ ຄວາມເຊື່ອ ແລະຄວາມເຄົາລົບໜ້າຖື ຕະຫລອດຈົນຄວາມເຈັບປວດແລະຄວາມໂສກເສົ້າ
- ໃນພັນທະສັນຍາໃໝ່ ຄຣິດສະຕຽນຖືກສອນໃຫ້ຮ້ອງເພງສັນລະເສີນເພື່ອຖວາຍແດ່ພະເຈົ້າເພື່ອເປັນການນະມັດສະການພະອົງ

## ເພັນເຕຄອດ, ເທດສະການທ້າຍອາທິດ

### ນິຍາມ

"ເທດສະການທັ່ງອາທິດ" ແມ່ນເທດສະການ ທີ່ຈະຕ້ອງຈັດຂຶ້ນຫລັງຈາກ ຫ້າສິບມື້ຈາກວັນ "ເພັນເຕຄອດ. "

- ເທດການທ້າຍອາທິດ ຄືໄລຍະເວລາເຖິງເຈັດອາທິດ (ຫ້າສິບມື້) ຫຼັງການລ້ຽງສະຫລອງຜົນແຮກໃນພັນທະສັນຍາໃໝ່. ເທດການນີ້ເອີ້ນວ່າ "ເພັນເຕຄອດ" ຊຶ່ງມີ "ຫ້າສິບ" ເປັນສ່ວນຫນຶ່ງຂອງຄວາມໝາຍ.
- ເທດການທ້າຍອາທິດຈັດຂຶ້ນເພື່ອສະເຫລີມສະຫລອງການເລີ່ມຕົ້ນການເກັບກ່ຽວເຂົ້າ. ນອກຈາກນີ້ຍັງເປັນຊ່ວງເວລາທີ່ຈະລະນຶກເຖິງທີ່ແລກ ທີ່ພຣະເຈົ້າປະທານພຣະບັນຍັດຂອງພຣະອົງໃຫ້ກັບອິດສະຣາເອນເທິງແຜ່ນສິລາທີ່ປະທານໃຫ້ແກ່ໂມເຊ.
- ໃນພັນທະສັນຍາໃໝ່ນັ້ນ, ມື້ເພັນເຕຄອດມີຄວາມສຳຄັນເປັນພິເສດ ເພາະເປັນຊ່ວງເວລາທີ່ບັນດາຜູ້ເຊື່ອໃນພຣະເຢຊູຄຣິດໄດ້ຮັບພຣະວິນຍານບໍລິສຸດໃນວິທີໃໝ່.


generated on Thu Jul 10 08:45:04 2025

## ເພື່ອນ

### ນິຍາມ

ຄຳວ່າ "ເພື່ອນ" ຄົນທີ່ໄປກັບອີກຄົນໜຶ່ງ ຫຼື ຄົນທີ່ຄົບຫາກັບອີກຄົນໜຶ່ງ, ຢ່າງເຊັ່ນ ໃນການເປັນເພື່ອນ ຫຼື ຄູ່ສົມຣົດ.

- ເພື່ອນທີ່ຜ່ານປະສົບການມາດ້ວຍກັນ, ຮ່ວມກິນເຂົ້າດ້ວຍກັນ, ແລະຊ່ວຍເຫຼືອ ແລະໃຫ້ກຳລັງໃຈກັນແລະກັນ.
- ການແປຄຳນີ ຕາມເນື້ອຫາ ສາມາດແປດ້ວຍຄຳຫລືຄຳເວົ້າທີ

ມີໝາຍວ່າ "ເພື່ອນ" ຫຼື "ເພື່ອນຮ່ວມທາງ ຜູ້ທີ່ໃຫ້ການສະ ໜັບສະໜຸນທີ່ໄປດ້ວຍກັນ."

## ເພື່ອນບ້ານ

### ນິຍາມ

ຄຳ ວ່າ "ເພື່ອນບ້ານ" ມັກຈະໝາຍເຖິງຄົນທີ່ອາໄສຢູ່ໃກ້ໆ. ມັນຍັງສາມາດໝາຍ
ເຖິງຜູ້ອື່ນທີ່ອາໄສຢູ່ໃນຊຸມຊົນຫຼືກຸ່ມຄົນກຸ່ມດຽວກັນໂດຍທົ່ວໄປ.

- "ເພື່ອນບ້ານ" ແມ່ນຜູ້ທີ່ຈະໄດ້ຮັບການປົກປ້ອງແລະປະຕິບັດດ້ວຍຄວາມກະລຸນາເພາະວ່າລາວເປັນສ່ວນ ໜຶ່ງ ຂອງຊຸມຊົນດຽວກັນ.
- ໃນຄຳພີພັນທະສັນຍາ ໃໝ່ກ່ຽວກັບຊາວສະມາເຣຍທີ່ມີຄຸນງາມຄວາມດີ, ພຣະເຢຊູໄດ້ໃຊ້ຄຳວ່າ "ເພື່ອນບ້ານ", ໂດຍຂະຫຍາຍຄວາມໝາຍຂອງມັນໃຫ້ລວມເອົາມະນຸດທຸກຄົນ, ແມ່ນແຕ່ຄົນທີ່ຖືວ່າເປັນສັດຕູ.
- ຖ້າເປັນໄປໄດ້, ມັນເປັນການດີທີ່ສຸດທີ່ຈະແປ ຄຳ ສັບນີ້ດ້ວຍ ຄຳ ຫລືປະໂຫຍກທີ່ມີຄວາມໝາຍ ວ່າ "ຄົນທີ່ອາໃສຢູ່ໃກ້ຄຽງ".

## ເມຍນ້ອຍ

### ນິຍາມ

ເມຍນ້ອຍເປັນຜູ້ຍິງທີ່ເປັນເມຍຄົນທີ່ສອງຂອງຜູ້ຊາຍທີ່ມີເມຍແລ້ວ ເມຍນ້ອຍມັກຈະບໍ່ໄດ້ແຕ່ງງານກັບຜູ້ຊາຍຄົນນັ້ນຢ່າງຖືກຕ້ອງຕາມກົດໝາຍ.

- ໃນພັນທະສັນຍາເດີມ, ເມຍນ້ອຍມັກຈະເປັນທາດຍິງ.
- ເມຍນ້ອຍໄດ້ມາໂດຍການຊື້, ໂດຍການຄອບຄອງທາງທະຫານ, ຫລືການຈ່າຍໜີ.
- ສຳລັບກະສັດ, ການມີສະໜົມຫລາຍຄົນ ເປັນເຄື່ອງໝາຍຂອງການມີອຳນາດ.
- ພັນທະສັນຍາໃໝ່ສອນວ່າ ການມີເມຍນ້ອຍເປັນການຂັດຕໍ່ພຣະປະສົງຂອງພຣະເຈົ້າ.

## ເມດຕາ, ເຕັ້ມໄປດ້ວຍຄວາມເມດຕາ

### ນິຍາມ

ຄຳວ່າ "ເມດຕາ" ຫລື "ເຕັ້ມໄປດ້ວຍຄວາມເມດຕາ" ບົ່ງບອກເຖິງການໃຫ້ຄວາມຊ່ວຍເຫລືອກັບຄົນທີ່ຕ້ອງການຄວາມຊ່ວຍເຫລືອ, ໂດຍສະເພາະ ເວລາທີ່ຄົນເຫລົ່ານັ້ນໄດ້ຮັບຄວາມລຳບາກ.

- ຄຳວ່າ "ເມດຕາ" ຍັງສາມາດລວມເອົາຄວາມໝາຍຂອງການບໍ່ໄດ້ລົງໂທດຄົນທີ່ເຮັດບາງສິ່ງບາງຢ່າງຜິດພາດ.
- ບຸກຄົນທີ່ເຕັ້ມໄປດ້ວຍອຳນາດ ຄືດັ່ງກະສັດທີ່ໄດ້ຖືກອະທິບາຍໄວ້ວ່າ "ເຕັ້ມດ້ວຍຄວາມເມດຕາ" ເມື່ອກະສັດອົງນັ້ນ ປະຕິບັດຕໍ່ປະຊາຊົນດ້ວຍໃຈເມດຕາປານີ ບໍ່ແມ່ນດ້ວຍໃຈໂຫດຮ້າຍຕໍ່ພວກເຂົາ.
- ການເຕັ້ມໄປດ້ວຍຄວາມເມດຕາ ຍັງໝາຍເຖິງ ການໃຫ້ອະໄພແກ່ຄົນທີ່ເຮັດຜິດຕໍ່ເຮົາ.
- ເຮົາໄດ້ສະແດງຄວາມເມດຕາແລ້ວ ເວລາທີ່ເຮົາໄດ້ຊ່ວຍເຫລືອຄົນທີ່ຕ້ອງການການຊ່ວຍເຫລືອຢ່າງຮີບດ່ວນ.
- ພຣະເຈົ້າມີຄວາມເມດຕາຕໍ່ພວກເຮົາ, ແລະ ພຣະອົງ ກໍຕ້ອງ ການໃຫ້ພວກເຮົາ ມີຄວາມເມດຕາຕໍ່ຄົນອື່ນ.

### ຄຳແນະນຳໃນການແປ

- ແຕ່ນັ້ນກໍຂຶ້ນຢູ່ກັບເນື້ອໃນຂອງເລື່ອງທັງໝົດ "ຄວາມເມດຕາ" ສາມາດແປໄດ້ອີກວ່າ, "ຄວາມກະລຸນາ" ຫລື "ຄວາມເຫັນໃຈ" ຫລື "ຄວາມອີດູຕົນສົງສານ."
- ຄຳວ່າ "ເຕັ້ມໄປດ້ວຍຄວາມເມດຕາ" ສາມາດແປໄດ້ອີກວ່າ, "ມີຄວາມຮູ້ສຶກອີດູຕົນສົງສານ" ຫລື "ມີໃຈກະລຸນາຕໍ່" ຫລື "ຍົກໂທດໃຫ້ແກ່."


generated on Thu Jul 10 08:45:04 2025

- "ສະແດງຄວາມເມດຕາແກ່" ຫລື "ມີຄວາມເມດຕາຕໍ່" ສາມາດແປໄດ້ອີກວ່າ, "ປະຕິບັດດ້ວຍໃຈກະລຸນາ" ຫລື "ມີຄວາມກະລຸນາສົ່ງສານຕໍ່."

## ເມນຄີເຊເດັກ

### ຂ້ເທັດຈິງ

ໃນໄລຍະເວລາທີ່ອັບຣາຮາມຍັງມີຊີວິດຢູ່, ເມນຄີເຊເດັກ ເປັນກະສັດປົກຄອງນະຄອນຊາເລັມ (ເຊິ່ງຕໍ່ມາແມ່ນ, "ນະຄອນເຢຣູຊາເລັມ")

- ຊື່ຂອງເມນຄີເຊເດັກ ມີຄວາມໝາຍວ່າ, "ກະສັດແຫ່ງຄວາມຊອບທັມ" ແລະຕຳແໜ່ງຂອງເພິ້ນແມ່ນ "ກະສັດແຫ່ງນະຄອນຊາເລັມ" ເຊິ່ງໝາຍເຖິງ "ກະສັດແຫ່ງຄວາມສັນຕິສຸກ."
- ເພິ້ນຖືກກ່າວຂານວ່າເປັນ "ປະໂລຫິດຂອງພຣະເຈົ້າອົງສູງສຸດ."
- ເມນຄີເຊເດັກ ຖືກກ່າວເຖິງເປັນເທື່ອທຳອິດໃນພຣະຄັມພີ ແມ່ນຕອນທີ່ລາວເອົາເຂົ້າຈີ່ແລະເຫລົ້າອະງຸ່ນໃຫ້ອັບຣາມ ພາຍຫລັງທີ່ອັບຣາມຊ່ວຍຊີວິດໂລດ ເຊິ່ງເປັນຫລານຂອງລາວ ໃຫ້ພົ້ນຈາກບັນດາກະສັດທີ່ມີອຳນາດ. ອັບຣາມຖວາຍໜຶ່ງສ່ວນສິບຈາກເຄື່ອງຂອງທີ່ປຸ້ນມາໄດ້ດ້ວຍໄຊຊະນະ ໃຫ້ແກ່ເມນຄີເຊເດັກ.
- ໃນພຣະຄັມພີໃໝ່, ໄດ້ອະທິບາຍວ່າ ເມນຄີເຊເດັກ ແມ່ນບຸກຄົນໆໜຶ່ງ ທີ່ບໍ່ມີພໍ່ແມ່. ເພິ້ນຖືກເອີ້ນວ່າປະໂລຫິດ ແລະ ກະສັດທີ່ປົກຄອງຕະຫລອດໄປ.
- ໃນພຣະຄັມພີໃໝ່ ຍັງບອກອີກວ່າ ພຣະເຢຊູເຈົ້າ ເປັນປະໂລຫິດຕາມແບບ "ການຈັດລະບຽບຂອງເມນຄີເຊເດັກ." ພຣະເຢຊູເຈົ້າ ບໍ່ໄດ້ສືບທອດເຊື້ອສາຍມາຈາກເຜົ່າເລວີ ຄືກັບປະໂລຫິດຂອງອິດສະຣາເອນ. ພຣະອົງເປັນປະໂລຫິດ ໂດຍແມ່ນພຣະເຈົ້າເປັນຜູ້ປະທານໃຫ້, ເຊັ່ນດຽວກັບເມນຄີເຊເດັກ.
- ການອະທິບາຍຄຳເຫລົ່ານີ້ກ່ຽວກັບພຣະອົງ ແມ່ນຂຶ້ນກັບພື້ນຖານໃນພຣະຄັມພີ, ເມນຄີເຊເດັກ ຈຶ່ງເປັນປະໂລຫິດທີ່ເປັນມະນຸດ ແຕ່ຖືກແຕ່ງຕັ້ງໂດຍພຣະເຈົ້າ ເພື່ອໃຫ້ເປັນໂຕແທນ ຫລືແມ່ໃສ່ພຣະເຢຊູເຈົ້າ, ທີ່ເປັນກະສັດແຫ່ງຄວາມສັນຕິສຸກ ແລະ ແຫ່ງຄວາມຊອບທັມຕະຫລອດໄປ ແລະຊົ່ງເປັນປະໂລຫິດຜູ້ຍິ່ງໃຫຍ່ຂອງພວກເຮົາ.

## ເມັດພືດ, ນ້ຳເຊື້ອ

### ນິຍາມ

ແກ່ນແມ່ນສ່ວນໜຶ່ງຂອງຕົ້ນໄມ້ທີ່ປູກຢູ່ໃນພື້ນດິນເພື່ອຂະຫຍາຍພັນຕົ້ນໄມ້ຊະນິດດຽວກັນໃຫ້ຫຼາຍ.
ມັນຍັງມີຄວາມໝາຍຫລາຍໆຮູບແບບດ້ວຍ.

- ຄຳວ່າ“ ເມັດພືດ” ຖືກໃຊ້ເປັນຕົວເລກແລະອີເລັກໂທຣນິກເພື່ອໝາຍ ເຖິງຈຸລັງນ້ອຍໆທີ່ຢູ່ພາຍໃນຜູ້ຊາຍຫລືຜູ້ຍິງທີ່ປະສົມປະສານເຮັດໃຫ້ເດັກນ້ອຍເຕີບໃຫຍ່ຢູ່ພາຍໃນແມ່ຍິງ, ນີເອີນວ່ານ້ຳເຊື້ອ.
- ກ່ຽວຂ້ອງກັບເລື່ອງນີ້, "ແນວພືດ" ຍັງຖືກນຳໃຊ້ເພື່ອໝາຍເຖິງລູກຫລານຫລືເຊື້ອສາຍຂອງຄົນເຮົາ.
- ຄຳສັບນີ້ມັກຈະມີຄວາມໝາຍຫລາຍພາສາ, ໂດຍອ້າງອີງໃສ່ຫລາຍເມັດຫລືຫລາຍກວ່າເຊື້ອສາຍໜຶ່ງ.
- ໃນຄຳອຸປະມາເລື່ອງຊາວນາທີ່ປູກເມັດພືດ, ພຣະເຢຊູປຽບທຽບເມັດພືດກັບ ພຣະຄຳຂອງພຣະເຈົ້າທີ່ຖືກປູກໄວ້ໃນຫົວໃຈຂອງຄົນເພື່ອໃຫ້ເກີດໝາກຜົນທາງຈິດວິນຍານທີ່ດີ.
- ອັກຄະສາວົກໂປໂລຍັງໃຊ້ ຄຳວ່າ“ ເຊື້ອສາຍ” ເພື່ອກ່າວເຖິງພຣະຄຳຂອງພຣະເຈົ້າ.

### ຄຳແນະນຳໃນການແປ

- ສຳລັບແນວພືດທີ່ໃຊ້ໃນການຮຽນຫນັງສື, ມັນດີທີ່ສຸດທີ່ຈະໃຊ້ ຄຳສັບທີ່ "ເມັດພືດ" ທີ່ຖືກໃຊ້ເປັນເປົ້າໝາຍສຳລັບສິ່ງທີ່ຊາວນາປູກໃນນາຂອງລາວ.
- ຄຳທີ່ໃຊ້ໃນຕົວຈິງຄວນໃຊ້ໃນສະພາບການເຊິ່ງມັນໝາຍເຖິງພຣະຄຳຂອງພະເຈົ້າ.
- ສຳລັບການໃຊ້ຕົວເລກທີ່ໝາຍເຖິງຄົນທີ່ມີເຊື້ອສາຍທີ່ມີຄອບຄົວດຽວກັນ, ມັນອາດຈະແຈ້ງກວ່າທີ່ຈະໃຊ້ ຄຳວ່າເຊື້ອສາຍພັນ. ບາງພາສາອາດຈະມີຄຳທີ່ມີຄວາມໝາຍວ່າ "ເດັກນ້ອຍແລະຫລານ."
- ສຳລັບ "ແນວພັນ" ຂອງຜູ້ຊາຍຫຼືຜູ້ຍິງ,ໃຫ້ພິຈາລະນາວິທີການເປົ້າ ໝາຍດ້ັງກ່າວສະແດງອອກໃນທາງທີ່ຈະບໍ່ເຮັດໃຫ້ຄົນອື່ນເຄືອງໃຈຫຼືອາຍ.


generated on Thu Jul 10 08:45:04 2025

## ເມັດເຂົ້າ

### ນິຍາມ

ຄຳວ່າ"ເມັດເຂົ້າ"ໂດຍປົກກະຕິອ້າງເຖິງເມັດຂອງພືດເຊັ່ນເຂົ້າສາລີ,ບາເລ, ຂ້າວໂພດ, ລູກເດືອຍຫລືເຂົ້າ.ແລະຍັງອ້າງເຖິງຕົ້ນເຂົ້າດ້ວຍ.

- ໃນພຣະຄັມພີ,ເມັດເຂົ້າຫລັກໆ ທີ່ມັກອ້າງເຖິງຄືເຂົ້າສາລີແລະບາເລ.
- ຫົວຂໍ້ເມັດເຂົ້າເປັນສ່ວນນຶ່ງຂອງຕົ້ນພືດທີ່ຖືເມັດເຂົ້າໃນນັ້ນ.
- ໝາຍເຫດໃນພຣະຄັມພີສະບັບເກົ່າໆບາງສະບັບໃຊ້ຄຳວ່າ"ເຂົ້າໂພດ"ເພື່ອອ້າງເຖິງທັນຍະພືດຫົວໄປ.
  ຢ່າງໃດກໍຕາມໃນພາສາອັງກິດສະໄໝໃໝ່,"ເຂົ້າໂພດ"ອ້າງເຖິງເມັດພືດພຽງຊະນິດດຽວ.

## ເມັມຟິດ

### ຂໍ້ເທັດຈິງ

ເມັມຟິດ ແມ່ນນະຄອນຫລວງບູຮານຂອງປະເທດອີຢິບ, ຕັ້ງຢູ່ແຄມແມ່ນ້ຳນິນ.

- ເມັມຟິດ ແມ່ນຕັ້ງຢູ່ບໍລິເວນທາງໃຕ້ຂອງປະເທດອີຢິບ, ສະເພາະແຕ່ທາງທິດໃຕ້ເຂດສາມຫລ່ຽມຂອງແມ່ນ້ຳນິນ,
  ເຊິ່ງເປັນບ່ອນທີ່ອຸດົມສົມບູນຫລາຍ ແລະ ເຕັມໄປດ້ວຍພືດຜົນຫລາຍຊະນິດ.
- ເນື່ອງຈາກວ່າ ເປັນບ່ອນທີ່ດິນມີຄວາມອຸດົມສົມບູນ ແລະ ສະຖານທີ່ກໍຕັ້ງຢູ່ລະຫວ່າງກາງຂອງອີຢິບທາງເໜືອແລະທາງໃຕ້
  ຈຶ່ງເຮັດໃຫ້ເມືອງເມັມຟິດກາຍເປັນເມືອງສຳຄັນໃນການຄ້າຂາຍ.

## ເມືອງຂອງດາວິດ

### ຂໍ້ເທັດຈິງ

ຄຳວ່າ "ເມືອງຂອງດາວິດ" ເປັນອີກຊື່ໜຶ່ງຂອງນະຄອນເຢຣູຊາເລັມແລະເບັດເລເຮັມ.

- ນະຄອນເຢຣູຊາເລັມເປັນບ່ອນທີ່ດາວິດປະທັບຢູ່ໃນຂະນະທີ່ເພິ່ນຊົງຄອບຄອງອິດສະຣາເອນ.
- ເບັດເລເຮັມ ເປັນເມືອງທີ່ດາວິດເກີດ.

## ເມືອງຕີເຣ,ຄົນຕີເຣ

### ຂໍ້ເທັດຈິງ

ເມືອງຕີເຣເປັນເມືອງເກົ່າແກ່ຂອງຊາວການາອານຢູ່ເທິງຊາຍຝັ່ງທະເລເມດິເຕເລນຽນ
ເຊິ່ງໃນຂະນະນີ້ກໍຄືສ່ວນຫນຶ່ງຂອງປະເທດເລບານອນສະໄໝປະຈຸບັນ. ປະຊາຊົນຂອງປະເທດນີ້ເອີ້ນວ່າ "ຄົນຕີເຣ."

- ສ່ວນຫນຶ່ງຂອງເມືອງຕີເຣຕັ້ງຢູ່ເທິງເກາະໃນທະເລ, ປະມານໜຶ່ງກິໂລແມັດຈາກຊາຍຝັ່ງ.
- ດ້ວຍສະພາບທີ່ຕັ້ງແລະຊັບພະຍາກອນທາງທຳມະຊາດທີ່ມີຄຸນຄ່າຕ່າງໆ ເຊັ່ນຕົ້ນແປກ,
  ເມືອງຕີເຣຈຶ່ງມີອຸດສາຫະກຳການຄ້າທີ່ຮັ່ງມີແລະຮັ່ງມີຫລາຍ.
- ກະສັດຮີຣາມແຫ່ງຕີເຣໄດ້ສົ່ງໄມ້ແປກແລະຄົນງານທີ່ຊຳນານໄປກໍ່ສ້າງພະລາດຊະວັງຂອງກະສັດດາວິດ.
- ຫລາຍປີຕໍ່ມາ ຮີຣາມໄດ້ມອບໄມ້ໃຫ້ກະສັດໂຊໂລໂມນແລະຄົນງານທີ່ຊຳນານງານເພື່ອກໍ່ສ້າງພຣະວິຫານ.
  ໂຊໂລໂມນໄດ້ຈ່າຍໃຫ້ຫ່ານດ້ວຍເຂົ້າບະເລແລະນ້ຳມັນມະກອກຈຳນວນຫລາຍ.
- ເມືອງຕີເຣມັກຈະກ່ຽວຂ້ອງກັບເມືອງໄຊດອນບູຮານ ທີ່ຢູ່ໃກ້ຄຽງກັນ. ສອງເມືອງນີ້ເປັນເມືອງທີ່ສຳຄັນໃນບໍລິເວນການາອານ
  ທີ່ເອີ້ນວ່າໂຟນີເຊຍ.

## ເມືອງບາຊານ

### ຂໍ້ເທັດຈິງ

ເມືອງບາຊານແມ່ນພາກພື້ນດິນແຄບທາງຕາເວັນອອກຂອງທະເລຄາລີເລ. ມັນໄດ້ກວມເອົາພື້ນທີ່ປະຈຸບັນແມ່ນພາກສ່ວນ ໜຶ່ງຂອງຊີເຣຍແລະ
ພູສູງໂກລານ

- .ເມືອງທີ່ລີໄຍຢູ່ໃນພຣະຄຳພີເດີມເອີ້ນວ່າ "ໂກລານ" ຕັ້ງຢູ່ໃນພາກພື້ນຂອງເມືອງບາຊານ.


generated on Thu Jul 10 08:45:04 2025

- ເມືອງບາຊານແມ່ນເຂດທີ່ມີຄວາມອຸດົມສົມບູນຫຼາຍເປັນທີ່ຮູ້ຈັກສໍາລັບຕົ້ນໄມ້ໂອກແລະທົ່ງຫຍ້າສໍາລັບລ້ຽງສັດ.
- ປະຖົມມະການບົດ 14 ໄດ້ບັນທຶກວ່າບາຊານແມ່ນສະຖານທີ່ແຫ່ງສົງຄາມລະຫວ່າງກະສັດແລະຫລາຍປະເທດທີ່ຕໍ່ສູ້ຂອງພວກເຂົາ.
- ໃນລະຫວ່າງການເດີນທາງໄປປະເທດອິດສະລາເອນໃນທະເລຊາຍ ຫລັງຈາກພວກເຂົາໜີຈາກປະເທດເອຢິບ, ພວກເຂົາໄດ້ຄອບຄອງບາງສ່ວນຂອງເຂດບາຊານ.
- ຫລາຍປີຕໍ່ມາກະສັດຊາໂລໂມນໄດ້ຮັບການສະໜອງຈາກຂົງເຂດນັ້ນ.

## ເມືອງເບັດເລເຮັມ, ເອຟາດທາ

### ຂໍ້ເທັດຈິງ

ເມືອງເບັດເລເຮັມເປັນເມືອງນ້ອຍໆໃນແຜ່ນດິນອິດສະຣາເອນໃກ້ກັບນະຄອນເຢຣູຊາເລັມ. ມັນໄດ້ຖືກເອີ້ນວ່າ "ເອຟາດທາ," ເຊິ່ງອາດຈະແມ່ນຊື່ເດີມຂອງມັນ.

- ເມືອງເບັດເລເຮັມໄດ້ຖືກເອີ້ນວ່າ "ເມືອງຂອງດາວິດ", ຕັ້ງແຕ່ກະສັດດາວິດໄດ້ເກີດມາຢູ່ທີ່ນັ້ນ.
- ຜູ້ປະກາດພຣະຄໍາມີເກໄດ້ກ່າວວ່າພຣະເມຊີອາຈະມາຈາກ "ເມືອງເບັດເລເຮັມ ເອຟາດທາ."
- ໂດຍການເຮັດໃຫ້ ຄໍາທໍານວຍນັ້ນສໍາເລັດເປັນຈິງ, ຫຼາຍປີຕໍ່ມາ.
- ຊື່ "ເມືອງເບັດເລເຮັມ" ຫມາຍຄວາມວ່າ "ເຮືອນເຂົ້າຈີ" ຫລື "ເຮືອນກິນອາຫານ".

## ເມືອງໂກຣິນໂທ, ຊາວໂກຣິນໂທ

### ຂໍ້ເທັດຈິງ

ເມືອງໂກຣິນໂທເປັນເມືອງໃນປະເທດອີຣັກ, ຫ່າງປະມານ 80 ກິໂລແມັດ ຢູ່ທາງຕາເວັນຕົກຂອງນະຄອນເອເທນ. ຊາວໂກຣິນໂທເປັນຄົນທີ່ອາໄສຢູ່ທີ່ເມືອງໂກຣິນໂທ.

- ເມືອງໂກຣິນເປັນທີ່ຕັ້ງຂອງຄຣິສຕະຈັກຄຣິສຕຽນຍຸກທໍາອິດ.
- ພັນທະສັນຍາໃໝ່, 1 ໂກຣິນໂທແລະ 2ໂກຣິນໂທ ເປັນຈົດ

ໝາຍທີ່ຂຽນໂດຍໂປໂລເຖິງຄຣິສຕຽນທີ່ອາໄສຢູ່ໃນເມືອງ ໂກຣິນໂທ.

- ໃນການເດີນທາງປະກາດສາສະໜາຄັ້ງທໍາອິດ, ໂປໂລຢູ່ທີ່ເມືອງໂກຣິນໂທປະມານ 18 ເດືອນ.
- ໂປໂລໄດ້ພົບຜູ້ເຊື່ອຊື່ ອາກີລາ ແລະປຣິຊະກີລາຂະນະທີ່ຢູ່ໃນເມືອງໂກຣິນໂທ.
- ບັນດາຜູ້ນໍາຄຣິສຕະຈັກຍຸກທໍາອິດທີ່ກ່ຽວຂ້ອງກັບເມືອງໂກຣິນໂທໄດ້ແກ່ ຕີໂມທຽວ, ຕີໂຕ, ອາໂປໂລ, ແລະສີລາ.

## ເມືອງໂກໂລຊາຍ, ຊາວໂກໂລຊາຍ

### ຂໍ້ເທັດຈິງ

ໃນສະໄໝພັນທະສັນຍາໃໝ່, ໂກໂລຊາຍເປັນເມືອງທີ່ຕັ້ງຢູ່ໃນແຄວ້ນຟີເຄຍ, ຂອງໂຣມັນ ໃນປະຈຸບັນນີ້ຢູ່ໃນບໍລິເວັນຕາເວັນຕົກສ່ຽງໃຕ້ຂອງປະເທດຕຸຣກກີ. ຊາວໂກໂລຊາຍເປັນຄົນທີ່ອາໄສຢູ່ໃນເມືອງໂກໂລຊາຍ.

- ເມືອງໂກໂລຊາຍຕັ້ງຢູ່ໃນດິນແດນທີ່ຫ່າງຈາກທະເລເມດິເຕຣາເນປະມານ 160 ກິໂລແມັດ, ເມືອງໂກໂລຊາຍຢູ່ໃນເສັ້ນທາງການຄ້າທີ່ສໍາຄັນລະຫວ່າງເມືອງເອເຟໂຊກັບແມ່ນ້ໍາຢູເຟຕິດ.
- ຂະນະທີ່ໂປໂລຖືກຄຸກຢູ່ໃນນະຄອນໂຣມ ທ່ານຂຽນຈົດໝາຍເຖິງ "ຊາວໂກໂລຊາຍ" ເພື່ອແກ້ໄຂຄໍາສອນບໍ່ຈິງໃນໝູ່ຜູ້ເຊື່ອທີ່ເມືອງໂກໂລຊາຍ.
- ເມື່ອໂປໂລຂຽນຈົດໝາຍນີ້, ທ່ານບໍ່ເຄີຍໄປຢ້ຽມຢາມຄຣິສຕະຈັກທີ່ເມືອງທີ່ໂກໂລຊາຍ, ແຕ່ໄດ້ຍິນຂ່າວກ່ຽວກັບຜູ້ເຊື່ອທີ່ນັ້ນຈາກເອປາຟຼາ, ຊຶ່ງເປັນເພື່ອນຮ່ວມງານຂອງທ່ານ.
- ເອປາຟຼາອາດຈະເປັນຄຣິສຕຽນທີ່ຫໍ່ໆງນໃນການກໍ່ຕັ້ງຄຣິສຕະຈັກທີ່ເມືອງໂກໂລຊາຍ.
- ພຣະທໍາຟີເລໂມນເປັນຈົດໝາຍທີ່ໂປໂລຂຽນເຖິງຜູ້ທີ່ເປັນເຈົ້າຂອງທາດຄົນໜຶ່ງໃນເມືອງໂກໂລຊາຍ.


generated on Thu Jul 10 08:45:04 2025

## ເມືອງໂທອາດ

### ຂໍ້ເທັດຈິງ

ເມືອງໂທອາດເປັນເມືອງທ່າເຮືອທີ່ຕັ້ງຢູ່ທາງຝັ່ງຕະເວັນຕົກສຽງເໜືອຂອງແຂວງໂຣມັນບູຮານຂອງເອເຊຍ.

- ໂປໂລໄດ້ໄປຢ້ຽມເມືອງໂທອາດຢ່າງນ້ອຍສາມເທື່ອໃນລະຫວ່າງການເດີນທາງໄປຫາແຖບທີ່ຕ່າງກັນເພື່ອເທດສະໜາຂ່າວປະເສີດ.
- ມີຢູ່ເທື່ອໜຶ່ງໃນເມືອງໂທອາດ, ໂປໂລໄດ້ເທດສະໜາຢ່າງຍາວນານໄປຈົນເຖິງເວລາກາງຄືນແລະຊາຍໜຸ່ມຄົນໜຶ່ງຊື່ຢູຕີໂຂ ໄດ້ຫລັບໄປຂະນະທີ່ທ່ານນັ່ງຟັງຢູ່. ເພາະວ່າທ່ານໄດ້ນັ່ງຢູ່ໃນປ່ອງຢ້ຽມທີ່ເປີດຢູ່, ຢູຕີໂຂໄດ້ຕົກລົງມາຈາກທີ່ສູງແລະເສຍຊີວິດ. ດ້ວຍລິດອຳນາດຂອງພຣະເຈົ້າ, ໂປໂລໄດ້ຊຸກຊີວິດໃຫ້ຊາຍໜຸ່ມຄົນນີ້ກັບມາອີກຄັ້ງ.
- ເມື່ອໂປໂລຢູ່ໃນກຸງໂຣມ,ທ່ານໄດ້ຂໍຕີໂມທຽວນຳມ້ວນຫນັງສືຂອງທ່ານແລະເສື້ອຄຸມຂອງທ່ານທີ່ທ່ານຖີ້ມໄວ້ໃນເມືອງໂທອາດມາດ້ວຍ.

## ເມົາເຫລົ້າ,ຄົນຂີເຫລົ້າ

### ນິຍາມ

ຄຳວ່າ "ເມົາເຫລົ້າ" ຫມາຍເຖິງການມຶນເມົາ ຈາກການດື່ມ ເຫລົ້າ ຫລາຍເກີນໄປ.

- "ຄົນຂີເຫລົ້າ" ເປັນຄົນທີ່ມັກເມົາເຫລົ້າ ຄົນປະເພດນີ ອາດເອີ້ນວ່າ "ໂຣກຜິດເຫລົ້າທີ່ເປັນມາດົນ" ດ້ວຍເຊັ່ນກັນ.
- ພຣະຄັມພີ ບອກຜູ້ເຊື່ອ ບໍ່ໃຫ້ ເມົາດ້ວຍເຄື່ອງດື່ມ ທີ່ມີເຊື້ອເຫລົ້າ ແຕ່ຕ້ອງຄວບຄຸມ ໂດຍພຣະວິນຍານ ບໍຣິສຸດຂອງພຣະເຈົ້າ.
- ພຣະຄັມພີ ສອນວ່າ ຄວາມມຶນເມົາ ບໍ່ສະຫລາດ ແລະມີອິດທິພົນ ຕໍ່ບຸກຄົນ ໃຫ້ທຳບາບ ທາງໃດທາງຫນຶ່ງດ້ວຍ.
- ອີກວິທີ ໃນການແປ "ເມົາເຫລົ້າ" ອາດລວມເຖິງ"ອາການບໍ່ມີສະຕິ" ຫລື "ອາການມຶນເມົາ" ຫລື "ດື່ມຫາດເຫລົ້າຫລາຍ

ເກີນໄປ"ຫລື "ເຕັ້ມໄປດ້ວຍເຄື່ອງດື່ມທີ່ມັກໃຈ້ຄົນແລ້ວ"

## ເມເຊັກ

### ຂໍ້ເທັດຈິງ

ເມເຊັກ ແມ່ນຊື່ຂອງຜູ້ຊາຍສອງຄົນໃນພຣະຄັມພີເດີມ.

- ເມເຊັກ ຜູ້ໜຶ່ງ ເປັນລູກຊາຍຂອງຢາເຟດ.
- ເມເຊັກ ອີກຄົນໜຶ່ງ ແມ່ນຫລານຊາຍຂອງ ເຊມ.
- ເມເຊັກ ຍັງແມ່ນຊື່ຂອງດິນແດນ, ເຊິ່ງອາດຈະຕັ້ງຊື່ຕາມຊາຍຄົນນີ.
- ດິນແດນຂອງເມເຊັກ ອາດຈະຕັ້ງຢູ່ໃນບາງສ່ວນຂອງປະເທດຕຸຣະກີໃນປະຈຸບັນ.

## ເມໂສໂປເຕເມຍ, ອາຣາມ ນາຫາຣາອິມ

### ຂໍ້ເທັດຈິງ

ເມໂສໂປເຕເມຍ ແມ່ນພື້ນທີ່ຂອງດິນແດນທີ່ຢູ່ລະຫວ່າງແມ່ນ້ຳຕິກຣິດ ແລະ ຢູເຟຣຕິດ. ສະຖານທີ່ຕັ້ງຂອງດິນແດນນີ ແມ່ນບໍລິເວນເຂດແດນຂອງປະເທດອີຣັກໃນປະຈຸບັນນີ.

- ໃນພຣະຄຳພີເດີມ, ດິນແດນແຫ່ງນີ ຖືກເອີ້ນວ່າເປັນ "ອາຣາມ ນາຫາຣາອິມ."
- ຄຳວ່າ "ເມໂສໂປເຕເມຍ" ໝາຍເຖິງ "ຢູ່ລະຫວ່າງແມ່ນ້ຳ." ປະໂຫຍກທີ່ບອກວ່າ "ອາຣາມ ນາຫາຣາອິມ" ໝາຍຄວາມວ່າ "ອາຣາມ ຂອງແມ່ນ້ຳສອງສາຍ."
- ອັບຣາຮາມ ໄດ້ອາໃສຢູ່ໃນເມືອງຕ່າງໆ ທີ່ຢູ່ໃນບໍລິເວນເຂດແດນເມໂສໂປເຕເມຍ ຄື ເມືອງເອີແລະຮາຣານ ກ່ອນທີ່ລາວຈະອົບພະຍົບໄປດິນແດນການາອານ.
- ນະຄອນບາບີໂລນ ເປັນນະຄອນທີ່ສຳຄັນແຫ່ງໜຶ່ງ ຂອງດິນແດນເມໂສໂປເຕເມຍ.
- ພາກພື້ນທີ່ເອີ້ນວ່າ "ເຄເດຍ" ແມ່ນສ່ວນໜຶ່ງຂອງດິນແດນເມໂສໂປເຕເມຍ.


generated on Thu Jul 10 08:45:04 2025

## ເຢຊີ

### ຂໍ້ເທັດຈິງ

ເຢຊີເປັນພໍ່ຂອງກະສັດດາວິດ, ແລະເປັນຫລານຊາຍຂອງນາງລູດແລະໂບອາດ.

- ເຢຊີມາຈາກເຜົ່າຂອງຢູດາ.
- ລາວເປັນຄົນ "ເອຟຣາທາ" ເຊິ່ງໝາຍຄວາມວ່າເຂົ້າມາຈາກເມືອງເອຟຣາທາ ( ເບັດເລເຮັມ ).
- ຜູ້ທຳນວາຍເອຊາຢາໄດ້ທຳນວາຍກ່ຽວກັບ "ໝໍ່ແໜງ" ຫລື "ຫງ່າ" ທີ່ມາຈາກ "ຕົ້ນຕະກຸນຂອງເຢຊີ" ແລະເກີດຜົນ.
  ນີ້ໝາຍເຖິງພຣະເຢຊູເຈົ້າທີ່ເປັນເຊື້ອສາຍຂອງເຢຊີ.

## ເຢດຊຸເຣເອນ

### ຂໍ້ເທັດຈິງ

ເຢດຊຸເຣເອນແມ່ນຊື່ຂອງເມືອງອິດສະຣາເອນທີ່ສຳຄັນ,ໃນເຂດແດນຂອງເຜົ່າອິດຊາຄາຕັ້ງຢູ່ທາງທິດຕາເວັນຕົກສ່ຽງໃຕ້ຂອງທະເລເກືອ.

- ເມືອງເຢດຊຸເຣເອນເປັນເມືອງໜຶ່ງໃນບັນດາຈຸດທີ່ຢູ່ທາງທິດຕາເວັນຕົກໃນເຂດຫົ້ງພຽງຂອງເມກາໂດ, ຊຶ່ງເອີ້ນອີກວ່າ "ຮ່ອມພູແຫ່ງ
  ເຢດຊຸເຣເອນ"
- ກະສັດຂອງອິດສະຣາເອນຫລາຍຄົນໄດ້ມີພະລາຊະວັງຂອງພວກເຂົາໃນເມືອງເຢດຊຸເຣເອນ.
- ສວນອະງຸ່ນຂອງນາໂບດໄດ້ຕັ້ງຢູ່ໃກ້ກັບວັງຂອງກະສັດອາຮາບໃນເມືອງເຢດຊຸເຣເອນ.
  ຜູ້ທຳນວາຍເອລີຢາໄດ້ທຳນວາຍຕໍ່ອາຮາບຢູ່ທີ່ນັ້ນ.
- ເຢເຊເບນເມຍທີ່ຊົ່ວຂອງອາຮາບຖືກຂ້າຕາຍໃນເຢດຊຸເຣເອນ.
- ມີຫຼາຍເຫດການທີ່ສຳຄັນອື່ນໆເກີດຂຶ້ນໃນເມືອງນີ້, ໃນນັ້ນມີການສູ້ຮົບຫຼາຍຄັ້ງ.

## ເຢທະໂຣ, ເຣອູເອນ

### ຂໍ້ເທັດຈິງ

ຊື່ "ເຢທະໂຣ" ແລະ "ເຣອູເອນ" ຖືກໃຊ້ໃນການອ້າງເຖິງພໍ່ຂອງເມຍໂມເຊ, ຄືຊິບໂປຣາ. ແລະຍັງມີຜູ້ຊາຍອີກສອງຄົນທີ່ຊື່ວ່າ "ເຣອູເອນ"
ໃນພຣະສັນຍາເດີມ.

- ເມື່ອໂມເຊເປັນຄົນລ້ຽງແກະໃນດິນແດນມີດີອານ, ລາວໄດ້ແຕ່ງງານກັບລູກສາວຂອງຜູ້ຊາຍມີດີອານຊື່ວ່າເຣອູເອນ.
- ຕໍ່ມາເຣອູເອນໄດ້ຖືກເອີ້ນໃນນາມ "ເຢທະໂຣປະໂຣຫິດແຫ່ງມີດີອານ." ອາດຈະເປັນໄປໄດ້ວ່າ "ເຣອູເອນ" ເປັນຊື່ຂອງເຊື້ອສາຍເຂົາ.
- ເມື່ອພຣະເຈົ້າໄດ້ເວົ້າກັບໂມເຊຈາກພຸ່ມໄມ້ທີ່ມີໄຟລຸກຢູ່, ຂະນະທີ່ໂມເຊກຳລັງລ້ຽງຝູງແກະຂອງເຢທະໂຣ,
- ໃນເວລາຕໍ່ມາ, ຫຼັງຈາກທີ່ພຣະເຈົ້າໄດ້ຊ່ວຍກູ້ຊາວອິດສະຣາເອນຈາກພວກເອຢິບແລ້ວ,
  ເຢທະໂຣໄດ້ອອກມາຫາຊາວອິດສະຣາເອນໃນຖິ່ນແຫ້ງແລ້ງກັນດານແລະໃຫ້ຄຳແນະນຳທີ່ດີແກ່ໂມເຊກ່ຽວກັບການຕັດສິນວຽກງານຂອງປະຊາຊົນ.
- ລາວໄດ້ເຊື່ອໃນພຣະເຈົ້າເມື່ອລາວໄດ້ຍິນເລື່ອງການອັດສະຈັນທັງໝົດທີ່ພຣະເຈົ້າໄດ້ເຮັດເພື່ອອິດສະຣາເອນໃນປະເທດເອຢິບ.
- ລູກຊາຍຜູ້ໜຶ່ງຂອງເອຊາວມີຊື່ວ່າ ເຣອູເອນ.
- ຜູ້ຊາຍອີກຜູ້ໜຶ່ງທີ່ຊື່ວ່າເຣອູເອນໄດ້ຖືກກ່າວເຖິງໃນຕະກູນຂອງອິດສະຣາເອນຜູ້ທີ່ໄດ້ກັບຄືນໄປຕັ້ງຖິ່ນຖານໃໝ່ໃນຢູດາຫລັງຈາກທີ່ພວກເຂົາໄດ້ສິ້ນສຸດໃນ

## ເຢຣີໂກ

### ຂໍ້ເທັດຈິງ

ເຢຣີໂກເປັນເມືອງທີ່ມີອໍານາດໃນແຜ່ນດິນການາອານ. ມັນຕັ້ງຢູ່ທິດຕາເວັນຕົກຂອງແມ່ນ້ຳຢໍແດນແລະຢູ່ທາງພາກເໜືອຂອງທະເລເກືອ.

- ເຊັ່ນດຽວກັນຊາວການາອານທຸກຄົນ, ປະຊາຊົນຂອງເຢຣີໂກນະມັດສະການພະເຈົ້າປອມ.
- ເມືອງເຢລີໂກເປັນເມືອງທຳອິດໃນແຜ່ນດິນການາອານທີ່ພຣະເຈົ້າບອກໃຫ້ຊາວອິດສະຣາເອນຍຶດເອົາ.
- ເມື່ອໂຢຊວຍນຳຊາວອິດສະຣາເອນຕໍ່ສູ້ເອົາເມືອງເຢຣີໂກ,
  ພຣະເຈົ້າໄດ້ເຮັດການອັດສະຈັນອັນຍິ່ງໃຫຍ່ເພື່ອຊ່ວຍພວກເຂົາເອົາຊະນະເມືອງນັ້ນໄດ້.


generated on Thu Jul 10 08:45:04 2025

## ເຢຣູຊາເລັມ

### ຂໍ້ເທັດຈິງ

ເຢຣູຊາເລັມແຕ່ເດີມນັ້ນເປັນເມືອງບູຮານຂອງການາອານທີ່ຕໍ່ມາກາຍເປັນເມືອງທີ່ສຳຄັນທີ່ສຸດໃນອິດສະຣາເອນ. ມັນຕັ້ງຢູ່ປະມານ 34 ກິໂລແມັດທາງຕາເວັນຕົກຂອງທະເລເກືອພາກເໜືອຂອງເມືອງເບັດເລເຮັມ.ແລະຍັງເປັນເມືອງຫລວງຂອງອິດສະຣາເອນໃນປັດຈຸບັນ.

- ຊື ”ເຢຣູຊາເລັມ” ນີ້ຖືກກ່າວເຖິງເທືອທຳອິດໃນພຣະທຳໂຢຊວຍ. ຊື່ອື່ນໃນພຣະສັນຍາເດີມຂອງເມືອງນີ້ລວມມີ ”ຊາເລັມ,” ”ເມືອງຂອງເຢບຸດ,” ແລະ ”ຊີໂອນ.” ຄຳວ່າ ”ເຢຣູຊາເລັມ”ແລະ ”ຊາເລັມ” ມາຈາກຮາກສັບດຽວກັບໝາຍຄວາມວ່າ ”ສັນຕິສຸກ.”
- ນະຄອນເຢຣູຊາເລັມແຕ່ເດີມເປັນເມືອງທີ່ໝັ້ນຂອງຊາວເຢບຸດທີ່ເອີນວ່າ ”ຊີໂອນ” ເຊິ່ງກະສັດດາວິດໄດ້ຍຶດເອົາແລະສ້າງຂຶ້ນເປັນເມືອງຫລວງຂອງເພິ່ນ.
- ໂຊໂລໂມນລູກຊາຍຂອງດາວິດໄດ້ສ້າງພຣະວິຫານແຫ່ງທຳອິດໃນນະຄອນເຢຣູຊາເລັມ, ເທິງພູໂມລີຢາ, ເຊິ່ງເປັນພູເຂົາທີ່ອັບຣາຮາມໄດ້ຖວາຍອີຊາກລູກຊາຍຂອງລາວໃຫ້ພຣະເຈົ້າ. ພຣະວິຫານໄດ້ຖືກສ້າງຂຶ້ນໃໝ່ຢູ່ທີ່ນັ້ນຫລັງຈາກທີ່ຖືກພວກບາບີໂລນທຳລາຍ.
- ເມືອງຈາກວ່າພຣະວິຫານຕັ້ງຢູ່ໃນນະຄອນເຢຣູຊາເລັມ, ການສະເຫລີມສະຫລອງເທດສະການສຳຄັນຂອງຊາວຢິວຈຶ່ງໄດ້ຈັດຂຶ້ນຢູ່ທີ່ນັ້ນ.
- ຄົນທົ່ວໄປມັກຈະກ່າວເຖິງການ ”ຂຶ້ນໄປ” ເຖິງນະຄອນເຢຣູຊາເລັມຍ້ອນວ່ານະຄອນນີ້ຕັ້ງຢູ່ເທິງພູເຂົາ.

## ເຢຮູ

### ຂໍ້ເທັດຈິງ

ເຢຮູແມ່ນຊື່ຜູ້ຊາຍສອງຄົນໃນພຣະຄຳພີເດີມ.

- ເຢຮູລູກຊາຍຂອງຮານານີເປັນຜູ້ທຳນວາຍໃນສະໄໝຂອງກະສັດອາຮາບແຫ່ງອິດສະຣາເອນແລະກະສັດເຢໂຮຊາຟັດແຫ່ງຢູດາ.
- ເຢຮູລູກຊາຍ ( ຫລືຜູ້ສືບເຊື້ອສາຍ ) ຂອງເຢໂຮຊາຟັດເປັນນາຍພົນໃນກອງທັບອິດສະຣາເອນ.
- ເຢຮູໄດ້ຂ້າກະສັດຊົ່ວສອງຄົນຄື: ກະສັດໂຢຣາມແຫ່ງອິດສະຣາເອນແລະອາຮາດແຫ່ງຢູດາ.
- ກະສັດເຢຮູຢັ້ງໄດ້ຂ້າພີ່ນ້ອງທັ້ງໝົດຂອງກະສັດອາຮາບຄົນກ່ອນລວມເຖິງພະຣາຊິນີຊົ່ວເຢເຊເບນ.
- ເຢຮູໄດ້ທຳລາຍສະຖານທີ່ຕ່າງໆຂອງການນະມັດສະການພະບາອານໃນເມືອງຊາມາເຣຍແລະຂ້າຜູ້ທຳນວາຍຂອງພຣະບາອານທັ້ງໝົດ.
- ກະສັດເຢຮູໄດ້ຮັບໃຊ້ພຣະເຈົ້າ,ຢາເວ,ອົງຫ່ຽງແທ້ ແລະເປັນກະສັດປົກຄອງອິດສະຣາເອນເປັນເວລາຊາວແປດປີ.

## ເຢັບທາ

### ຂໍ້ເທັດຈິງ

ເຢັບທາເປັນນັກລົບຈາກກີເລອາດເຊິ່ງເຮັດໜ້າທີ່ເປັນຜູ້ປົກຄອງຂອງອິດສະຣາເອນ.

- ໃນພຣະທຳເຮັບເຣີ 11:32, ເຢັບທາໄດ້ຮັບການຍ້ອງຍໍວ່າເປັນຜູ້ນຳທີ່ສຳຄັນທີ່ໄດ້ປົດປ່ອຍປະຊາຊົນຂອງລາວອອກຈາກສັດຕູຂອງພວກເຂົາ.
- ລາວໄດ້ຊ່ວຍປົດປ່ອຍຊາວອິດສະຣາເອນອອກຈາກຄົນອຳໂມນແລະໄດ້ນຳພາປະຊາຊົນຂອງລາວໃຫ້ເອົາຊະນະຊາວເອຟຣາອິມ.
- ເຖິງຢ່າງໃດກໍຕາມ,ເຢັບທາໄດ້ໃຫ້ຄຳສັນຍາທີ່ໂງ່ຈ້າແລະຮີບຮ້ອນຕໍ່ພຣະເຈົ້າເຊິ່ງສິ່ງທີ່ເຂົາໃຫ້ລາວຖວາຍລູກສາວຂອງລາວເປັນເຄື່ອງບູຊາ.

## ເຢເຊເບນ

### ຂໍ້ເທັດຈິງ

ເຢເຊເບນເປັນມະເຫສີຂອງກະສັດອາຮາບແຫ່ງອິດສະຣາເອນ.

- ເຢເຊເບນມີອິດທິພົນໃນການເຮັດໃຫ້ອາຮາບແລະອິດສະຣາເອນທັ້ງໝົດບູຊາຮູບເຄົາລົບ.
- ນາງໄດ້ຂ້າຜູ້ທຳນວາຍຂອງພຣະເຈົ້າຫລາຍໆຄົນ.
- ເຢເຊເບນໄດ້ເຮັດໃຫ້ຊາຍບໍຣິສຸດຊື່ນໆໂບດຖືກຂ້າເພື່ອທີ່ວ່າອາຮາບສາມາດລັກເອົາສວນອາງຸ່ນຂອງນາໂບດ.
- ໃນທີ່ສຸດເຢເຊເບນກໍຖືກຂ້າຕາຍຍ້ອນສິ່ງທີ່ຊົ່ວທັ້ງໝົດທີ່ນາງໄດ້ເຮັດ. ເອລີຢາໄດ້ທຳນວາຍວ່ານາງຈະຕາຍຢ່າງໃດແລະທຸກສິ່ງກໍເກີດຂຶ້ນດັ່ງທີ່ລາວໄດ້ທຳນວາຍໄວ້ທຸກປະການ.

## ເຢເຣມີຢາ

### ຂໍ້ເທັດຈິງ

ເຢເຣມີຢາເປັນຜູ້ທຳນວາຍຊອງພຣະເຈົ້າໃນອານາຈັກຢູດາ. ໃນພຣະສັນຍາເດີມພຣະທຳເຢເຣມີຢາໄດ້ບັນທຶກຄຳທຳນວາຍຕ່າງໆຂອງລາວ.

- ເຊັ່ນດຽວກັບຜູ້ທຳນວາຍສ່ວນຫລາຍ,
  ເຢເຣມີຢາມັກຈະເຕືອນປະຊາຊົນອິດສະຣາເອນວ່າພຣະເຈົ້າຈະລົງໂທດເຂົາສຳຫລັບຄວາມບາບຂອງພວກເຂົາ.
- ເຢເຣມີຢາທຳນວາຍວ່າຊາວບາບີໂລນຈະເຂົ້າມາຢຶດເອົານະຄອນເຢຣູຊາເລັ່ມ.ຊຶ່ງເຮັດໃຫ້ປະຊາຊົນບາງຄົນຄຽດແຄ້ນ.ສະນັ້ນພວກເຂົາຈຶ່ງເອົາລາວໂຍນ
- ເຢເຣມີຢາ ຂຽນວ່າລາວປາຖະໜາໃຫ້ຕາທັ້ງສອງຂ້າງເປັນ “ບໍ່ນ້ຳພຸແຫ່ງນ້ຳຕາ,“
  ເພື່ອສະແດງຄວາມເສົ້າສະລົດໃຈຢ່າງເລິກເຊິ່ງຕໍ່ການກະບົດແລະຄວາມທຸກທໍລະມານຂອງປະຊາຊົນຂອງລາວ.

## ເຢໂຣໂບອາມ

### ຂໍ້ເທັດຈິງ

ເຢໂຣໂບອາມລູກຊາຍຂອງເນບັດເປັນກະສັດຄົນທຳອິດຂອງອານາຈັກທາງພາກເໜືອຂອງອິດສະຣາເອນປະມານ 900-910
ປີກ່ອນຄຣິສຕະສັກກະຣາດ. ເຢໂຣໂບອາມອີກອົງໜຶ່ງ, ເປັນລູກຊາຍຂອງກະສັດໂຢອາດໄດ້ປົກຄອງອິດສະຣາເອນປະມານ120 ປີຕໍ່ມາ.

- ພຣະຢາເວໃຫ້ຄຳທຳນວາແກ່ເຢໂຣໂບອາມລູກຊາຍຂອງເນບັດວ່າເຂົາຈະເປັນກະສັດຕ່ຈາກຊາໂລໂມນແລະລາວຈະໄດ້ປົກຄອງປະຊາຊົນສິບເຜົ່າຂອງອິ
- ເມື່ອກະສັດໂຊໂມນສິ້ນຊີວິດ,ສິບເຜົ່າທາງພາກເໜືອຂອງອິດສະຣາເອນໄດ້ກະບົດຕໍ່ກະສັດເຣໂຫໂບອາມລູກຊາຍຂອງກະສັດໂຊໂລໂມນແລະແຕ່ງຕັ້ງເຢໂ
  ປະໃຫ້ເຣໂຫໂບອາມເປັນກະສັດພຽງສອງເຜົ່າທາງໃຕ້ຄື: ຢູດາແລະເບັນຢາມິນ.
- ເຢໂຣໂບອາມເປັນກະສັດທີ່ຊົ່ວຮ້າຍຫລາຍແລະເປັນຜູ້ທີ່ນຳປະຊາຊົນນະມັດສະການຮູບເຄົ່າຮົບແທນທີ່ຈະພາມານະມັດສະການພຣະເຈົ້າຢາເວ.
  ກະສັດທັ້ງໝົດຂອງອິດສະຣາເອນກໍໄດ້ເຮັດຕາມຕົວຢ່າງທີ່ຊົ່ວຮ້າຍຄືເຢໂຣໂບອາມ.
- ເກືອບ 120 ປີຕໍ່ມາ, ກະສັດເຢໂຣໂບອາມອີກຜູ້ໜຶ່ງ ເລີ່ມປົກຄອງອານາຈັກທາງພາກເໜືອຂອງອິດສະຣາເອນ.
  ເຢໂຣໂບອາມຜູ້ນີ້ເປັນລູກຊາຍຂອງກະສັດໂຢອາດແລະເພິ່ນເປັນຄົນຊົ່ວຮ້າຍເໝືອນກັບບັນດາກະສັດໃນສະໄໝກ່ອນຂອງອິດສະຣາເອນ.
- ເຖິງວ່າຈະເປັນແນວນັ້ນ,ພຣະເຈົ້າຍັງມີຄວາມເມດຕາຕໍ່ອິດສະຣາເອນແລະຊ່ວຍກະສັດເຢໂຣໂບອາມນີ້ໃຫ້ໄດ້ແຜ່ນດິນແລະຕັ້ງເຂດແດນສຳຫຼັບ
  ດິນແດນຂອງພວກເຂົາ.

## ເຢໂຮຊາຟັດ

### ຂໍ້ເທັດຈິງ

ເຢໂຮຊາຟັດເປັນຊື່ຂອງຜູ້ຊາຍຢ່າງນ້ອຍສອງຄົນໃນພຣະຄຳເດີມ.

- ຜູ້ຊາຍທີ່ຮູ້ຈັກດີທີ່ສຸດໃນທີ່ນີ້ແມ່ນກະສັດເຢໂຮຊາຟັດເຊິ່ງເປັນກະສັດອົງທີ ສີ່ທີ່ປົກຄອງອານາຈັກຢູດາ.
- ພຣະອົງໄດ້ຟື້ນຟູຄວາມສະຫງົບສຸກລະຫວ່າງຢູດາແລະອິດສະຣາເອນ,ແລະໄດ້ທຳລາຍພະຫຼ່ມ.
- ເຢໂຮຊາຟັດອີກຜູ້ໜຶ່ງແມ່ນ “ຜູ້ບັນທຶກ“
  ສຳຫລັບດາວິດແລະໂຊໂລໂມນ.ໜ້າທີ່ຂອງລາວແມ່ນຂຽນເອກະສານໃຫ້ກະສັດລົງລາຍເຊັ່ນແລະບັນທຶກປະຫວັດຂອງເຫດການສຳຄັນຕ່າງໆທີ່ເກີດຂຶ້ນ

## ເຢໂຮຍອາກິມ

### ຂໍ້ເທັດຈິງ

ເຢໂຮຍອາກິມເປັນກະສັດຊົ່ວຮ້າຍທີ່ປົກຄອງອານາຈັກຢູດາເລີ່ມຕົ້ນປະມານ 608 ປີກ່ອນຄຣິສຕະສັກກະຣາດ
ພຣະອົງເປັນລູກຊາຍຂອງກະສັດໂຢສີຢາ.ຊື່ເດີມຂອງພຣະອົງແມ່ນເອລີອາກິມ.

- ເນໂກຟາໂຣຂອງເອຢິບໄດ້ປ່ຽນຊື່ຂອງເອລີຢາກິມເປັນເຢໂຮຍອາກິມແລະແຕ່ງຕັ້ງໃຫ້ເພິ່ນເປັນກະສັດຂອງຢູດາ.
- ເນໂກບັງຄັບໃຫ້ເຢໂຮຍອາກິມເສັຍພາສີໃນອັດຕາທີ່ສູງໃຫ້ແກ່ເອຢິບ.
- ຕໍ່ມາຢູດາຖືກຮຸກຮານໂດຍກະສັດເນບູກາດເນັດຊາ,ເຢໂຮຍອາກິມເປັນໜຶ່ງໃນຄົນເຫຼົ່ານັ້ນທີ່ຖືກຈັບແລະຖືກນຳຕົວໄປທີ່ບາບີໂລນ.
- ເຢໂຮຍອາກິມເປັນກະສັດທີ່ຊົ່ວຮ້າຍເພິ່ນໄດ້ນຳຢູດາອອກຫ່າງຈາກພຣະເຈົ້າຢາເວ.ຜູ້ທຳນວາຍເຢເຣມີຢາໄດ້ກ່າວທຳນວາຍຕັກເຕືອນເພິ່ນ.


generated on Thu Jul 10 08:45:04 2025

## ເຢໂຮຍອາດາ

### ຂໍ້ເທັດຈິງ

ເຢໂຮຍອາດາ ແມ່ນປະໂຣຫິດທີ່ຊ່ອຍເຊື່ອງແລະປ້ອງກັນຮັກສາລູກຊາຍຂອງກະສັດອາຮາຊີຢາ ຄື ໂຢອາດ
ຈົນເຕີບໃຫຍ່ພ້ອມທີ່ຈະປະກາດໃຫ້ເປັນກະສັດໄດ້.

- ເຢໂຮຍອາດາ ໄດ້ແຕ່ງທະຫານຫຼາຍຮ້ອຍຄົນ ເພື່ອປ້ອງກັນຮັກສາໂຢອາດທີ່ຍັງນ້ອຍຢູ່
  ໃນເວລາທີ່ເພິ່ນໄດ້ຮັບການແຕ່ງຕັ້ງໃຫ້ຂຶ້ນເປັນກະສັດ ໂດຍປະຊາຊົນໃນວິຫານ.
- ເຢໂຮຍອາດາ ໄດ້ພາປະຊາຊົນທຳລາຍແທ່ນບູຊາທັງໝົດທີ່ເປັນຂອງພະທຽມ ຄື ພະບາອານ.
- ໃນໄລຍະເວລາທີ່ຍັງມີຊີວິດ,ປະໂຣຫິດເຢໂຮຍອາດາໄດ້ໃຫ້ຄຳແນະນຳແກ່ກະສັດໂຢອາດເພື່ອໃຫ້ເພິ່ນເຊື່ອຟັງພຣະເຈົ້າແລະປົກຄອງປະຊາຊົນດ້ວຍຄວາ
- ຜູ້ຊາຍອີກຄົນໜຶ່ງທີ່ຊື່ເຢໂຮຍອາດາເປັນພໍ່ຂອງເບນີຢາ.

## ເຢໂຮຣາມ,ໂຢຣາມ

### ຂໍ້ເທັດຈິງ

ເຢໂຮຣາມເປັນຊື່ຂອງກະສັດທີ່ຕ່າງກັນສອງພຣະອົງໃນພຣະຄຳພີເດີມ.ກະສັດທັງສອງນີ້ຍັງມີຊື່ວ່າ “ໂຢຣາມ“.

- ກະສັດເຢໂຮຣາມອົງໜຶ່ງປົກຄອງອານາຈັກຢູດາເປັນເວລາແປດປີ.ພຣະອົງເປັນລູກຊາຍຂອງກະສັດເຢໂຮຊາຟັດ.ນີ້ແມ່ນກະສັດທີ່ຮູ້ຈັກກັນດີໃນນາມຊື
  “ເຢໂຮຣາມ“.
- ກະສັດເຢໂຮຣາມອີກອົງໜຶ່ງຊຶ່ງປົກຄອງອານາຈັກອິດສະຣາເອນເປັນເວລາສິບສອງປີ. ເພິ່ນເປັນລູກຊາຍຂອງກະສັດອາຮາບ.
- ກະສັດເຢໂຮຣາມແຫ່ງຢູດາຊຶ່ງປົກຄອງໃນໄລຍະເວລາຂອງຜູ້ທຳນວາຍເຢເຣມີຢາ,ດາໂນເອນ,ໂອບາດີຢາ,ແລະເອເຊເກຽນ
  ທີ່ໄດ້ທຳນວາຍໃນອານາຈັກຢູດາ.
- ເຢໂຮຣາມກໍໄດ້ປົກຄອງໃນຊ່ວງເວລາໜຶ່ງທີ່ກະສັດເຢໂຮຊາຟັດພໍ່ຂອງເພິ່ນປົກຄອງຢູດາ.
- ການແປບາງສະບັບອາດເລືອກທີ່ຈະໃຊ້ຊື “ເຢໂຮຣາມ“ ຢ່າງສະໝ່ຳສະເໝີເມື່ອກະສັດອົງນີ້ຂອງອິດສະຣາເອນໄດ້ກ່າວເຖິງໃນຊື
  “ໂຢຣາມ“ ສຳຫຼັບກະສັດຂອງຢູດາ.
- ອີກວິທີນຶ່ງທີ່ຈະລະບຸຢ່າງຈະແຈ້ງແຕ່ລະຊື່ຄວນຈະລວມເອົາຊື່ພໍ່ຂອງລາວລົງທ້າຍ.

## ເຢໂຮອາກິນ

### ຂໍ້ເທັດຈິງ

ເຢໂຮອາກິນເປັນກະສັດອີກອົງໜຶ່ງທີ່ປົກຄອງຢູ່ເໜືອອານາຈັກຢູດາ

- ເຢໂຮອາກິນໄດ້ເປັນກະສັດເມື່ອຕອນອາຍຸ 18 ປີ
  ພຣະອົງໄດ້ປົກຄອງພຽງສາມເດືອນແລະຫຼັງຈາກນັ້ນພຣະອົງໄດ້ຖືກຈັບໂດຍກອງທັບບາບີໂລນແລະຖືກນຳຕົວໄປບາບີໂລນ.
- ໃນໄລຍະອັນສັ້ນທີ່ໄດ້ປົກຄອງນັ້ນ,ເຢໂຮອາກິນໄດ້ເຮັດສິ່ງທີ່ຊົ່ວຮ້າຍຄືກະສັດມານາເຊຜູ້ເປັນປູ່ແລະກະສັດເຢໂຮອາກິມຜູ້ເປັນພໍ່ໄດ້ເຮັດ.

## ເຣໂຮໂບອາມ

### ຂໍ້ເທັດຈິງ

ເຣໂຮໂບອາມ ແມ່ນຫນຶ່ງໃນລູກຊາຍຂອງກະສັດໂຊໂລໂມນ,
ແລະໄດ້ກາຍເປັນກະສັດຂອງປະເທດຊາດອິສະຣາເອນຫລັງຈາກໂຊໂລໂມນສິ້ນຊີວິດ.

- ໃນຕອນເລີ່ມຕົ້ນຂອງກະສັດ, ກະສັດເຣໂບອາມມີຄວາມຮຸນແຮງກັບປະຊາຊົນຂອງລາວ, ສະນັ້ນສິບເຜົ່າຂອງອິສະຣາເອນ
  ໄດ້ກະບົດຕໍ່ລາວແລະສ້າງຕັ້ງ "ອານາຈັກອິສະຣາເອນ" ໃນພາກເໜືອ.
- ເຣໂຮໂບອາມ ສືບຕໍ່ເປັນກະສັດຂອງອານາຈັກພາກໃຕ້ຂອງຢູດາເຊິ່ງປະກອບດ້ວຍສອງຊົນເຜົ່າຄືຢູດາແລະເບັນຢາມິນ.

ເຣໂຮໂບອາມ ແມ່ນຄົນຊົ່ວຮ້າຍຜູ້ທີ່ບໍ່ໄດ້ເຊື່ອຟັງ ພຣະເຈົ້າຢາເວ, ແຕ່ນະມັດສະການບັນດາພຣະປອມ.


generated on Thu Jul 10 08:45:04 2025

## ເລບານອນ

### ຂໍ້ເທັດຈິງ

ເລບານອນເປັນເຂດດິນທີ່ສວຍງາມທີ່ຕັ້ງຢູ່ເທິງພູເຂົາຕາມແຄມຝັ່ງ ທະເລ ເມດິເຕີເຣເນ້ຽນ ທາງເໜືອຂອງປະເທດ ອິດສະຣາເອນ
ໃນສະໄໝພຣະຄຳພີ ດິນແດນແຫ່ງນີ້ເປັນປ່າດົງຕຶບຫນາ ເຊັ່ນຕົ້ນສີດາ ແລະ ຕົ້ນສົນ.

- ກະສັດໂຊໂລໂມນໄດ້ສົ່ງຄົນງານໄປເລບານອນໄປຕັດຕົ້ນສີດາເພື່ອໃຊ້ໃນການສ້າງພຣະວິຫານຂອງພຣະເຈົ້າ.
- ຊາວເລບານອນໃນສະໄໝນູຮານໃຫ້ຄວາມສຳຄັນກັບທີ່ຢູ່ອາໄສກັບຊາວຝີນີເຊຍເຊິ່ງມີທັກສະໃນການສ້າງເຮືອ

## ເລວີ, ຄົນເລວີ

### ຂໍ້ເທັດຈິງ

ເລວີເປັນລູກຊາຍຄົນໜຶ່ງໃນສິບສອງຂອງຢາໂຄບ ຄຳວ່າ " ເລວີ "
ອ້າງອີງເຖິງບຸກຄົນຜູ້ທີ່ເປັນສະມາຊິກຂອງຊົນເຜົ່າອິດສະຣາເອນເອງທີ່ສືບເຊື້ອສາຍຄົນເລວີ.

- ຄົນເລວີມີໜ້າທີ່ຮັບຜິດຊອບໃນພຣະວິຫານ ແລະ ການເຮັດພິທີກຳຫາງສາດສະໜາ ລວມເຖິງການຖວາຍເຄື່ອງບູຊາ ແລະ ອະທິຖານ.
- ພວກພະໂລຫິດຊາວຢິວທັ້ງໝົດເປັນຄົນຫຶ່ມາຈາກເຜົ່າເລວີ ແລະ ບາງສ່ວນຂອງເຜົ່າເລວີ
  ( ແນວໃດກໍ່ຕາມບໍ່ແມ່ນຄົນໃນເຜົ່າເລວີທຸກຄົນຈະເປັນພະໂລຫິດ )
- ພວກພະໂລຫິດທີ່ເປັນຄົນເລວີຈະຖືກແຍກອອກ ແລະ
  ໄດ້ອຸທິດຕົນສຳລັບເຮັດວຽກງານພິເສດໃນການປົ່ວລະບັດພຣະເຈົ້າໃນພຣະວິຫານ.
- ມີຜູ້ຊາຍສອງຄົນທີ່ຊື່ວ່າ " ເລວີ " ເປັນເຊື້ອສາຍຂອງພຣະເຢຊູ ແລະ ຊື່ຂອງພວກເຂົາຢູ່ໃນລຳດັບໃນໜັງສືພຣະກິດຕິຄຸນລູກາ.
- ສາວົກຂອງພຣະເຢຊູຄົນໜຶ່ງ ຄື ມັດທາຍ ກໍ່ຖືກເອີ້ນວ່າເລວີ.

## ເລວີອາທັນ

### ຂໍ້ເທັດຈິງ

ຄຳວ່າ " ເລວີອາທັນ " ອ້າງອີງເຖິງສັດທີ່ໂຕໃຫ່ຍທີ່ສຸນພັນໃນສັດທີ່ເກົ່າແກ່ທີ່ສຸດ ໄດ້ຖືກຂຽນໃນພັນທະສັນຍາເດີມ, ໃນພຣະຄຳພີ ໂຢບ, ເພງສັນລະເສີນ ແລະ ເອຊາຢາ.

- ເລວີອາທັນໄດ້ຖືກອະທິບາຍວ່າເປັນສັດໂຕໃຫ່ຍຫລາຍ, ຄ້າຍກັບງູ ແຂງແຮງ ດຸຮ້າຍ ແລະ ສາມມາດເຮັດໃຫ້ນ້ຳຮອບຕົວເອງ " ຮ້ອນ " ຄຳອະທິບາຍກ່ຽວກັບມັນຄ້າຍຽກັບອະທິບາຍເຖິງເລື່ອງໄນໂນເສີ.
- ຜູ້ປະກາດຖ້ອຍຄຳຂອງພຣະເຈົ້າເອຊະຢາອ້າງອີງເຖິງເລວີອາທັນວ່າເປັນ " ງູເຫລື້ອມໃຫຍ່ ."
- ຢາໂຄບໄດ້ຂຽນຈາກຄວາມຮູ້ທີ່ໄດ້ມາໂດຍຕົງເຖິງເລວີອາທັນ ດັ່ງນັ້ນ
  ສັດນີ້ດູເໝືອນຈະຫຍັງມີຊີວິດຢູ່ໃນຊ່ວງເວລາທີ່ລາວຍັງມີຊີວິດຢູ່.

## ເລອາ

### ຂໍ້ເທັດຈິງ

ເລອາເປັນເມຍຄົນໜຶ່ງຂອງຢາໂຄບ
ລາວເປັນແມ່ຂອງລູກຊາຍສິບຄົນຂອງຢາໂຄບທີ່ມີເຊື້ອສາຍແມ່ນບາງສ່ວນຂອງສິບສອງຊົນເຜົ່າຂອງອິດສະຣາເອນ.

- ພໍ່ຂອງເລອາຄືລາບັນ ຜູ້ທີ່ເປັນອ້າຍຂອງເລເບກາແມ່ຂອງຢາໂຄບ.
- ຢາໂຄບບໍ່ໄດ້ຮັກເລອາເທົ່າກັບທີ່ລາວຮັກເມຍຂອງລາວອີກຄົນໜຶ່ງຄືລາເຊວ
  ແຕ່ພຣະເຈົ້າກໍ່ຊົງເມດຕາເລອາຢ່າງຫຼວງຫຼາຍໂດຍໃຫ້ລາວມີລູກຢ່າງຫຼວງຫຼາຍ.
- ລູກຊາຍຄົນໜຶ່ງຂອງເລອາ ຄື ຢູດາ ເປັນເຊື້ອສາຍຂອງກະສັດກາວິດ ແລະ ພຣະເຢຊູ.


generated on Thu Jul 10 08:45:04 2025

## ເລືອດ,ໂລຫິດ

### ນິຍາມ

ຄຳວ່າ“ ເລືອດ” ໝາຍເຖິງແຫຼວສີແດງທີ່ອອກມາຈາກຜິວໜັງ ຂອງຄົນເຮົາເມື່ອມີການບາດເຈັບຫລືມີບາດແຜ.
ເລືອດແມ່ນສິ່ງທີ່ນຳເອົາສານອາຫານໃຫ້ຊີວິດ ແລະຮ່າງກາຍຂອງຄົນເຮົາ.

- ເລືອດເປັນສັນຍາລັກຂອງຊີວິດແລະເມື່ອມັນຖືກຫົດຫລືຖອກ, ມັນເປັນສັນຍາລັກເຖິງການສູນເສຍຊີວິດ, ຫລືຄວາມຕາຍ.
- ເມື່ອປະຊາຊົນຖວາຍເຄື່ອງບູຊາແດ່ພຣະເຈົ້າ, ພວກເຂົາໄດ້ຂ້າສັດແລະຖອກເລືອດຂອງມັນໃສ່ແທ່ນບູຊາ.
  ນີ້ເປັນສັນຍາລັກຂອງການເສຍສະລະຊີວິດຂອງສັດເພື່ອຈ່າຍຄ່າບາບຂອງຄົນ.
- ໂດຍຜ່ານການສິ້ນພຣະຊົນຂອງພຣະອົງເທິງໄມ້ກາງແຂນ,
  ເລືອດຂອງພຣະເຢຊູເປັນສັນຍາລັກເຮັດໃຫ້ຄົນເຮົາພົ້ນຈາກບາບກຳຂອງພວກເຂົາແລະຈ່າຍຄ່າການລົງໂທດທີ່ພວກເຂົາສົມຄວນໄດ້ຮັບຈາກບາບເຫລົ່ານັ້
- ຄຳເວົ້າທີ່ວ່າ“ ເນື້ອໜັງ ແລະ ເລືອດ” ໝາຍເຖິງມະນຸດ.
- ຄຳເວົ້າທີ່ວ່າ“ ເນື້ອໜັງ ແລະໂລຫິດຂອງຕົນເອງ” ໝາຍ ເຖິງຄົນທີ່ພີ່ນ້ອງກັນກັບທາງກຳມະພັນ.

### ຄຳແນະໃນນຳການແປ

- ຄຳສັບນີ້ຄວນຈະຖືກແປກັບ ຄຳທີ່ໃຊ້ໃນເລືອດເປັນເປົ້າໝາຍຂອງພາສາ.
- ຄຳວ່າ“ ເນື້ອໜັງ ແລະ ໂລຫິດ” ສາມາດແປເປັນ“ ຄົນ” ຫລື“ ມະນຸດ”.
- ອີງຕາມສະພາບການ, ຄຳວ່າ "ເນື້ອໜັງ ແລະເລືອດຂອງຂ້ອຍ" ສາມາດແປເປັນ "ຄອບຄົວຂອງຂ້ອຍເອງ" ຫລື
  "ຍາດພີ່ນ້ອງຂອງຂ້ອຍເອງ" ຫລື "ຄົນຂອງຂ້ອຍເອງ."
- ຖ້າມີການສະແດງອອກເປັນເປົ້າໝາຍພາສາ ທີ່ໃຊ້ກັບຄວາມ ໝາຍນີ, ການສະແດງອອກນັ້ນອາດຈະຖືກນຳໃຊ້ເພື່ອແປວ່າ "ເນື້ອໜັງ
  ແລະເລືອດ."

## ເລົ້າໂລມ, ຜູ້ເລົ້າໂລມ

### ນິຍາມ

ຄຳວ່າ "ເລົ້າໂລມ" ແລະ "ຜູ້ເລົ້າໂລມ" ກ່າວເຖິງການຊ່ວຍເຫລືອຄົນທີ່ມີຄວາມທຸກທາງຮ່າງກາຍ ຫຼື ເຈັບປວດທາງຈິດໃຈ.

- ຄົນທີ່ເລົ້າໂລມຄົນໃດຄົນໜຶ່ງເອີ້ນວ່າ "ຜູ້ເລົ້າໂລມ."
- ໃນພັນທະສັນຍາເດີມ, ຄຳວ່າ "ເລົ້າໂລມ" ໃຊ້ເພື່ອອະທິບາຍເຖິງການທີ່ພຣະເຈົ້າຊົ່ງພຣະກະລຸນາແລະຮັກປະຊາຊົນຂອງພຣະອົງ
  ແລະຊ່ວຍພວກເຂົາເມື່ອພວກເຂົາກຳລັງທຸກຍາກລຳບາກ.
- ໃນພັນທະສັນຍາໃໝ່, ບອກວ່າພຣະເຈົ້າຊົ່ງເລົ້າໂລມປະຊາຊົນຂອງພຣະອົງໂດຍທາງພຣະວິນຍານບໍຣິສຸດ.
  ຄົນເຫລົ່ານັ້ນທີ່ຮັບການເລົ້າໂລມກໍສາມາດໃຫ້ການເລົ້າໂລມຢ່າງດຽວກັນກັບຄົນອື່ນໆ ທີ່ກຳລັງປະສົບຄວາມທຸກຍາກໄດ້.
- ຄຳອະທິບາຍ "ຜູ້ເລົ້າໂລມຂອງອົດສະຣາເອນ" ກ່າວເຖິງພຣະເມຊີອາຜູ້ທີ່ຈະສະເດັດມາຊ່ວຍປະຊາຊົນຂອງພຣະອົງໃຫ້ລອດພົ້ນ.
- ພຣະເຢຊູຊົ່ງໄດ້ກ່າວເຖິງພຣະວິນຍານບໍຣິສຸດວ່າຊົ່ງເປັນ "ຜູ້

ເລົ້າໂລມ" ທີ່ຊ່ວຍຜູ້ເຊື່ອໃນພຣະເຢຊູ.

### ຄຳແນະນຳໃນການແປ

- "ເລົ້າໂລມ"ສາມາດແປໄປຕາມຖ້ອຍຄຳໄດ້ວ່າ "ການບັນເທົາຄວາມເຈັບປວດຂອງ," ຫຼື "ຊ່ວຍເຫຼືອ."

## ເວດມົນ, ໝໍຜີ, ຄາຖາ

### ນິຍາມ

ຄຳວ່າ "ເວດມົນ" ຫລື "ຄາຖາ" ອ້າງເຖິງການໃຊ້ເວດມົນຊຶ່ງກ່ຽວຂ້ອງ,
ກັບການກະທຳສິ່ງທີ່ມີພະລັງອຳນາດໂດຍການຊ່ວຍເຫລືອຈາກວິນຍານຊົ່ວ. "ໝໍຜີ" ຄືບາງຄົນທີ່ກະທຳເວດມົນ.

- ການໃຊ້ຄາຖາແລະເວດມົນສາມາດລວມເຖິງທັ້ງສິ່ງທີ່ເປັນຄຸນປະໂຫຍດ (ເຊັ່ນການຮັກສາບາງຄົນ)
  ແລະບາງສິ່ງບາງຢ່າງທີ່ເປັນອັນຕະລາຍ (ເຊັ່ນການສາບແຊ່ງບາງຄົນ).
  ແຕ່ເວດມົນທຸກປະເພດເປັນສິ່ງທີ່ຜິດເພາະວ່າພວກເຂົາໃຊ້ສິ່ງເຫລົ່ານີ້ໃຊ້ພະລັງອຳນາດຂອງວິນຍານຊົ່ວ.


generated on Thu Jul 10 08:45:04 2025

- ໃນພຣະຄຳພີ, ພຣະເຈົ້າກ່າວວ່າການໃຊ້ເວດມົນກໍຊົ່ວຮ້າຍພໍກັບຄວາມຍາຍທີ່ຊົ່ວຮ້າຍ (ເຊັ່ນ ການລ່ວງປະເວນີ ການກາບໄຫວ້ຮູບເຄົາລົບ, ແລະການຂູຊາຍັນເດັກ.)
- ຄຳວ່າ "ເວດມົນ" ຫລື "ຄາຖາ"ສາມາດແປໄດ້ດ້ວຍວ່າ, "ພະລັງອຳນາດຂອງວິນຍານຊົ່ວ" ຫລື "ການເສກຄາຖາ."
- ວິທີທີ່ເປັນໄປໄດ້ໃນການແປຄຳວ່າ "ໝໍຜີ" ສາມາດທັ້ງໝົດເຖິງ "ຄົນເຮັດວຽກດ້ານເວດມົນ" ຫລື "ຄົນເສກຄາຖາ" ຫລື "ບຸກຄົນຜູ້ກໍການອັດສະຈັນໂດຍໃຊ້ພະລັງອຳນາດຂອງວິນຍານຊົ່ວ."
- ໝາຍເຫດຄຳວ່າ "ເວດມົນ" ມີຄວາມໝາຍຕ່າງໄປຈາກຄຳວ່າ "ການຫ້ານາຍໂຊກຊະຕາ," ຊຶ່ງອ້າງເຖິງການພະຍາຍາມທີ່ຕິດຕໍ່ກັບໂລກຂອງວິນຍານ.

## ເວດມົນ, ຜູ້ມີຄາຖາອາຄົມ

### ນິຍາມ

ຄຳວ່າ "ເວດມົນ" ອ້າງເຖິງການກະທຳທີ່ໃຊ້ອຳນາດເໜືອທຳມະຊາດທີ່ບໍ່ໄດ້ມາຈາກພຣະເຈົ້າ "ຜູ້ມີຄາຖາອາຄົມ" ຄືຄົນທີ່ໃຊ້ເວດມົນ.

- ໃນອີຢິບ
  ເມື່ອພຣະເຈົ້າໄດ້ກະທຳການອັດສະຈັນຜ່ານທາງໂມເຊ,ຜູ້ມີຄາຖາອາຄົມຊາວອີຢິບຂອງຟາໂຣກໍສາມາດທຳນາງໆສິ່ງທີ່ເໝືອນກັນໄດ້,ແຕ່ອຳນາດຂອງພວກເ
- ເວດມົນມັກຈະກ່ຽວຂ້ອງກັບການເວົ້າຫຼືເສກຄາຖາເພື່ອໃຫ້ນາງສິ່ງທີ່ເໜືອທຳມະຊາດເກີດຂຶ້ນ.
- ພຣະເຈົ້າຊົງສັ່ງປະຊາກອນຂອງພຣະອົງວ່າບໍ່ໃຫ້ທຳເວດມົນຫຼືການທຳນວາຍໂຊກຊະຕາລາສີ.
- ພວກໝໍຜີເປັນພວກທີ່ມີຄາຖາອາຄົມ, ໂດຍປົກກະຕິເປັນຄົນທີ່ໃຊ້ເວດມົນທຳຮ້າຍຜູ້ອື່ນ.

## ເວລາ

### ນິຍາມ

ໃນພຣະຄຳພີ ຄຳວ່າ "ເວລາ" ມັກໃຊ້ເປັນສັນຍະລັກໃນການອ້າງອີງເຖິງລະດູການ ຫລື ຊ່ວງເວລາສະເພາະເຈາະຈົ້ງທີ່ເຫດການຕ່າງໆ ໄດ້ເກີດຂຶ້ນ. ມີຄວາມຫມາຍຄ້າຍກັບ "ສະໄໝ" ຫລື "ຍຸກ" ຫລື "ລະດູ."

- ທັ້ງດານີເອນແລະພຣະທຳພຣະນິມິດໄດ້ກ່າວເຖິງ "ເວລາ"
  ທີ່ມີຄວາມຫຍຸ້ງຍາກໃຫຍ່ຫລວງຫລືຄວາມທຸກຍາກລຳບາກທີ່ຈະເກີດຂຶ້ນເທິງແຜ່ນດິນໂລກ.
- ໃນຄຳວ່າ "ເວລາ, ເວລາຫລາຍ, ແລະເຄິ່ງໜຶ່ງຂອງເວລາ" ຄຳວ່າ "ເວລາ" ໝາຍເຖິງ "ປີ"
  ຄຳນີ້ໝາຍເຖິງໄລຍະເວລາສາມປີເຄິ່ງໃນຊ່ວງເວລາທີ່ມີຄວາມທຸກຍາກລຳບາກຄັ້ງໃຫຍ່ໃນຕອນທ້າຍຂອງຍຸກນີ້.
- ຄຳວ່າເຊັ່ນ "ເວລາເທື່ອທີ່ສອງ" ຫລື "ຫລາຍໆເວລາ" ໝາຍເຖິງຈຳນວນເທື່ອທີ່ມີເຫດການບາງຢ່າງໄດ້ເກີດຂຶ້ນ.
- ການ "ໃຫ້ທັນເວລາ" ໝາຍເຖິງການມາເຖິງຕາມຄາດໝາຍ, ແລະບໍ່ລ່າຊ້າ.
- ຂຶ້ນຢູ່ກັບຊ່ວງເວລາ, ຄຳວ່າ "ເວລາ" ສາມາດຈະແປວ່າ "ລະດູ" ຫລື "ຊ່ວງແຫ່ງເວລາ," ຫລື "ຊ່ວງເວລາ" ຫລື "ເຫດການ" ຫລື "ສິ່ງທີ່ໄດ້ປາກົດ."
- ຄຳເວົ້າທີ່ວ່າ "ເວລາແລະລະດູການ" ເປັນຄຳກ່າວເຊິ່ງປຽບທຽບ ເຊິ່ງກ່າວເຖິງຄວາມຄິດດຽວກັນສອງຄັ້ງ. ສິ່ງນີ້ສາມາດແປວ່າ "ເຫດການສະເພາະທີ່ເກີດຂຶ້ນໃນຊ່ວງເວລາສະເພາະ."

## ເວລາໃນພຣະ ຄຳ ພີ: ເດືອນ

### ນິຍາມ

ຄຳວ່າ "ເດືອນ" ໝາຍເຖິງໄລຍະເວລາທີ່ແກ່ຍາວປະມານ 4 ອາທິດ.
ຈຳນວນມື້ໃນແຕ່ລະເດືອນແຕກຕ່າງກັນຂຶ້ນກັບວ່າປະຕິທິນດວງຈັນຫລືແສງຕາເວັນຖືກນຳໃຊ້.

- ໃນປະຕິທິນຕາມຈັນທະປະຕິທິນ, ຄວາມຍາວຂອງແຕ່ລະເດືອນແມ່ນອີງຕາມ ຈຳນວນເວລາທີ່ຕ້ອງການເພື່ອໃຫ້ດວງຈັນໄປທົ່ວໂລກ, ປະມານ 29 ວັນ. ໃນລະບົບນີ້ມີ 12 ຫລື 13 ເດືອນໃນ ໜຶ່ງປີ. ເຖິງວ່າປີຈະມີ 12 ຫລື 13 ເດືອນ, ເດືອນທຳອິດກໍຖືກເອີ້ນເປັນຊື່ດຽວກັນເຖິງແມ່ນວ່າມັນອາດຈະເປັນລະດູທີ່ແຕກຕ່າງກັນ.
- ໄລຍະ "ເດືອນໃໝ່," ຫລືໄລຍະເລີ່ມຕົ້ນຂອງດວງຈັນທີ່ມີແສງສະຫວ່າງເບົາລົງ, ມັນແມ່ນຈຸດເລີ່ມຕົ້ນຂອງແຕ່ລະເດືອນໃນປະຕິທິນຈັນທະຄະຕິ.
- ທຸກໆຊື່ຂອງເດືອນທີ່ກ່າວເຖິງໃນພຣະຄຳພີແມ່ນປະຕິທິນຕາມຈັນທະປະຕິທິນນັບຕັ້ງແຕ່ນີເປັນລະບົບທີ່ຊາວອິດສະລາແອນໃຊ້. ຊາວຢິວສະໄໝນີ້ຍັງໃຊ້ປະຕິທິນນີ້ເພື່ອຈຸດປະສົງທາງສາດສະໜາ.
- ປະຕິທິນແສງຕາເວັນໃນຍຸກສະໄໝໃໝ່ແມ່ນອີງໃສ່ໄລຍະເວລາທີ່ໂລກຕ້ອງໃຊ້ເວລາໃນຮອບດວງອາທິດ (ປະມານ 365 ວັນ).ໃນລະບົບນີ້, ປີແມ່ນແບ່ງອອກເປັນ12ເດືອນສະເໝີ, ເຊິ່ງຄວາມຍາວຂອງແຕ່ລະເດືອນມີອາຍຸຕັ້ງແຕ່ 28 ເຖິງ 31 ວັນ.


generated on Thu Jul 10 08:45:04 2025

## ເວລາໃນພຣະຄໍາພີ: ຊົ່ວໂມງ

### ນິຍາມ

ຄໍາວ່າ“ ຊົ່ວໂມງ” ມັກຖືກນໍາໃຊ້ໃນພຣະຄໍາພີເພື່ອບອກວ່າເວລາໃດຂອງມື້ໃດມີເຫດການແນ່ນອນ.
ມັນຍັງຖືກໃຊ້ເປັນຕົວເລກເພື່ອໝາຍຄວາມວ່າ "ເວລາ" ຫລື "ຊ່ວງເວລາ."

- ຊາວຢິວນັບຊົ່ວໂມງກາງເວັນເຊິ່ງເລີ່ມຕົ້ນໃນຕອນເຊົ້າ (ປະມານ 6 ໂມງເຊົ້າ). ຕົວຢ່າງ, "ເວລາເກົ້າໂມງ" ຫມາຍຄວາມວ່າ "ປະມານຍ່າຍສາມໂມງໃນປະຈຸບັນ."
- ຊົ່ວໂມງກາງຄືນນັບຕັ້ງແຕ່ເວລາຕາເວັນຕົກ (ເວລາປະມານ 6 ໂມງແລງ). ຕົວຢ່າງ, "ຊົ່ວໂມງທີສາມຂອງຕອນກາງຄືນ" ຫມາຍຄວາມວ່າ "ປະມານເກົ້າໂມງແລງ" ໃນລະບົບປະຈຸບັນຂອງພວກເຮົາ ..
- ເນື່ອງຈາກການອ້າງອີງເຖິງເວລາໃນພຣະຄໍາພີຈະບໍ່ກົງກັບລະບົບເວລາໃນປະຈຸບັນ, ປະໂຫຍກເຊັ່ນ "ປະມານເກົ້າໂມງ" ຫລື "ປະມານຫົກໂມງແລງ" ສາມາດໃຊ້ໄດ້.
- ການແປບາງພາສາອາດຈະເພີ່ມປະໂຫຍກເຊັ່ນ "ຕອນແລງ" ຫລື "ຕອນເຊົ້າ" ຫລື "ຕອນບ່າຍ" ເພື່ອເຮັດໃຫ້ມັນແຈ່ມແຈ້ງວ່າເວລາກາງເວັນກໍາລັງເວົ້າເຖິງຫຍັງ.
- ປະໂຫຍກທີ່ວ່າ, "ໃນຊົ່ວໂມງນັ້ນ" ສາມາດແປເປັນ "ໃນເວລານັ້ນ" ຫລື "ໃນເວລານີ."
- ໂດຍອ້າງເຖິງພຣະເຢຊູ ຄໍາວ່າ "ເວລາຂອງພຣະອົງມາເຖິງແລ້ວ" ສາມາດແປເປັນ "ເວລາທີພຣະອົງມາເຖິງ" ຫລື "ເວລາກໍານົດສໍາລັບພຣະອົງໄດ້ມາເຖິງແລ້ວ."

## ເວລາໃນພຣະຄໍາພີ: ປີ

### ນິຍາມ

ໃນເວລາທີ່ໃຊ້ຕົວຈິງ, ຄໍາວ່າ "ປີ" ໃນພຣຄໍາພີໝາຍເຖິງໄລຍະເວລາໜຶ່ງທີ່ແກ່ຍາວເຖິງ 354 ວັນ.
ນີ້ແມ່ນອີງຕາມລະບົບປະຕິທິນຕາມຈັນທະປະຕິທິນເຊິ່ງອີງໃສ່ເວລາທີ່ມັນໃຊ້ເວລາເພື່ອໃຫ້ດວງຈັນໂຄຈອນຮ້ອມໂລກ.

- ໜຶ່ງປີໃນປະຕິທິນແສງຕາເວັນທີ່ທັນສະໄໝແກ່ຍາວເຖິງ 365 ວັນແບ່ງອອກເປັນ 12 ເດືອນໂດຍອີງໃສ່ຈໍານວນເວລາທີ່ໃຊ້ເວລາໃນທົ່ວໂລກເພື່ອເດີນທາງໄປທົ່ວດວງອາທິດ.
- ໃນທັ້ງສອງລະບົບປະຕິທິນປີໜຶ່ງມີ 12 ເດືອນ. ແຕ່ວ່າເດືອນ 13 ຕື່ມເປັນບາງຄັ້ງບາງຄາວຖືກເພີ່ມເຂົ້າປີໃນປະຕິທິນຈັນທະຄະຕິເພື່ອເຮັດໃຫ້ເປັນຄວາມຈິງທີ່ວ່າປີໜຶ່ງຕາມຈັນທະປະຕິທິນແມ່ນ 11 ວັນໜ້ອຍກວ່າປີທີ່ມີແສງອາທິດ. ສິ່ງນີ້ຊ່ວຍຮັກສາສອງປະຕິທິນໃຫ້ສອດຄ່ອງກັບກັນແລະກັນ.
- ໃນພຣຄໍາພີຄໍາວ່າ "ປີ" ຍັງຖືກໃຊ້ໃນຄວາມໝາຍເປັນຕົວເລກເພື່ອໝາຍເຖິງເວລາຫົວໄປເມື່ອມີເຫດການພິເສດເກີດຂຶ້ນ. ຕົວຢ່າງຂອງສິ່ງນີ້ລວມມີ, "ປີຂອງ ພຣະເຈົ້າເຍເວ" ຫລື "ໃນປີທີ່ແຫ້ງແລ້ງ" ຫລື "ປີທີ່ພໍໃຈຂອງພຣະຜູ້ເປັນເຈົ້າ." ໃນສະພາບການເຫຼົ່ານີ້, "ປີ" ສາມາດຖືກແປເປັນ "ເວລາ" ຫລື "ລະດູ" ຫລື "ໄລຍະເວລາ."

## ເວລາໃນພຣະຄໍາພີ: ມື້

### ນິຍາມ

ຄໍາວ່າ "ມື້" ທີ່ແທ້ຈິງໝາຍເຖິງໄລຍະເວລາໜຶ່ງຂອງເວລາທີ່ແກ່ຍາວຕະຫຼອດ 24 ຊົ່ວໂມງເຊິ່ງເລີ່ມຕົ້ນໃນເວລາທ່ຽງຄືນ.
ມັນຍັງຖືກໃຊ້ເປັນຕົວເລກ.

- ສໍາລັບຊາວອິດສະລາແອນແລະຊາວຢິວ, ມື້ໜຶ່ງເລີ່ມຕົ້ນໃນຕອນຕາເວັນຕົກຂອງມື້ໜຶ່ງ ແລະສິ້ນສຸດລົງໃນເວລາຕາເວັນຂຶ້ນຂອງມື້ຕໍ່ມາ.
- ບາງຄັ້ງຄໍາວ່າ "ວັນ" ຖືກໃຊ້ເປັນຕົວເລກເພື່ອໝາຍເຖິງໄລຍະເວລາທີ່ຍາວກວ່າ, ເຊັ່ນວ່າ "ວັນເວລາ ພຣະຍາເວ" ຫລື "ຍຸກສຸດທ້າຍ".
- ບາງພາສາຈະໃຊ້ການສະແດງອອກທີ່ແຕກຕ່າງກັນເພື່ອແປຄວາມໝາຍທີ່ໃຊ້ໃນຕົວເລກເຫຼົ່ານີ້ຫຼືຈະແປ "ວັນ" ທີ່ບໍ່ໃຊ້ປຽບທຽບເພື່ອໃຫ້ຖືກຕ້ອງຕາມສະພາບການເອີນ.
- ການແປພາສາອື່ນໆຂອງ "ມື້" ສາມາດປະກອບມີ, "ເວລາ" ຫລື "ລະດູ" ຫລື "ໂອກາດ" ຫລື "ເຫດການ," ຂຶ້ນກັບສະພາບການ.

.


generated on Thu Jul 10 08:45:04 2025

## ເວລາໃນພຣະຄຳພີ: ອາທິດ

### ນິຍາມ

ຄຳວ່າ“ ອາທິດ” ທີ່ຮູ້ຫນັງສືໝາຍເຖິງໄລຍະເວລາໜຶ່ງທີ່ໃຊ້ເວລາ 7 ວັນ.

- ໃນລະບົບການນັບເວລາຂອງຊາວຢິວ, ອາທິດໜຶ່ງເລີ່ມຕົ້ນທີ່ຕາເວັນຕົກດິນໃນວັນເສົາແລະສິ້ນສຸດລົງໃນເວລາຕາເວັນໃນວັນເສົາຕໍ່ມາ.
- ໃນພຣະຄຳພີ ຄຳວ່າ“ ອາທິດ” ບາງຄັ້ງໃຊ້ໃນຮູບເປັນຕົວເລກເພື່ອອ້າງເຖິງກຸ່ມຂອງ 7 ໜ່ວຍຕາມເວລາເຊັ່ນເຈັດປີ.
- "ງານບຸນປະຈຳອາທິດ" ແມ່ນການສະເຫຼີມສະຫຼອງການເກັບກ່ຽວເຊິ່ງໄດ້ຈັດຂຶ້ນເຈັດອາທິດຫລັງຈາກປັດສະຄາ. ມັນຍັງຖືກເອີ້ນວ່າ "ວັນເພນເຕຄໍ."

## ເວລາໃນພຣະຄຳພີ: ເຍັງ

### ນິຍາມ

ໃນສະໄໝພຣະຄຳພີ,“ ໂມງ”
ແມ່ນຊ່ວງເວລາຂອງເວລາກາງຄືນໃນເວລາທີ່ຜູ້ເຝົ້າຍາມຫລືຍາມເຝົ້າເມືອງກຳລັງປະຕິບັດໜ້າທີ່ເບິ່ງແຍງຄວາມປອດໄພຈາກສັດຕູ.

- ໃນພຣະຄຳພີເດີມ, ຊາວອິດສະລາແອນມີໂມງ 3 ໜ່ວຍເຊິ່ງເອີ້ນວ່າ "ຈຸດເລີ່ມຕົ້ນ" (ຕາເວັນຕົກລົງຮອດ 10 ໂມງແລງ), "ກາງ" (10 ໂມງເຊົ້າຫາ 2 ໂມງເຊົ້າ), ແລະໂມງເຊົ້າ (2 ໂມງເຊົ້າຫາຈັນອາທິດ).
- ໃນພຣະຄຳພີໃໝ່, ຊາວຢິວໄດ້ປະຕິບັດຕາມລະບົບໂລມັນແລະມີສີ່ໂມງ, ເຊິ່ງຕ້ັງຊື່ງ່າຍໆວ່າ "ທຳອິດ" (ຕາເວັນຕົກລົງເຖິງ 9 ໂມງແລງ), "ທີສອງ" (9 ໂມງກາງຄືນຫາ 12 ທ່ຽງຄືນ), "ທີສາມ" (12 ທ່ຽງຄືນຫາ 3 ໂມງເຊົ້າ), ແລະໂມງທີສີ (3 ໂມງເຊົ້າຫາຕອນເຊົ້າ).
- ສິ່ງເຫຼົ່ານີ້ຍັງສາມາດຖືກແປດ້ວຍການສະແດງອອກທົ່ວໄປຫຼາຍກວ່າເກົ່າເຊັ່ນ "ຕອນເດິກ" ຫລື "ເວລາທ່ຽງຄືນ" ຫລື "ຕອນເຊົ້າມືດ", ເຊິ່ງຂຶ້ນກັບໂມງໃດທີ່ຖືກກ່າວເຖິງ.

## ເວົ້າໃຫ້ຮ້າຍ, ຜູ້ເວົ້າໃຫ້ຮ້າຍ

### ນິຍາມ

ການເວົ້າໃຫ້ຮ້າຍໝາຍເຖິງການເວົ້າໃນທາງລົບ, ການທຳລາຍຊື່ສຽງຂອງຜູ້ອື່ນ.

- ການເວົ້າໃຫ້ຮ້າຍອາດເປັນລາຍງານຈິງ ຫລືການກ່າວຫາທີ່ຜິດ, ແຕ່ມັນມີຜົນເຮັດໃຫ້ຜູ້ອື່ນຄິດໃນທາງລົບຕໍ່ຄົນທີ່ຖືກເວົ້າໃຫ້ຮ້າຍນັ້ນຂໍ
- ຄຳຍາງຄຳໄດ້ແປຄຳວ່າ "ການເວົ້າໃຫ້ຮ້າຍ" ໝາຍເຖິງ: "ການເວົ້າຕໍ່ຕ້ານ" ຫລື "ການແຜ່ກະຈາຍລາຍງານທີ່ບໍ່ດີ" ຫລື "ການທຳລາຍຊື່ສຽງ."
- ຄົນທີ່ເວົ້າໃຫ້ຮ້າຍ "ຄົນແຈ້ງຂ່າວ"ຫລື"ຄົນມັກກະຈາຍຂ່າວລື."

## ເສຍໃຈ, ຄວາມເສຍໃຈ

### ນິຍາມ

ຄຳວ່າ " ເສຍໃຈ " ແລະ " ຄວາມເສຍໃຈ " ໝາຍເຖິງການສະແດງອອກຢ່າງຮຸ່ນແຮງເຖິງຄວາມເສົ້າໂສກ ແລະ ເສຍໃຈ ຫຼືສະລົດໃຈ.

- ບາງເທື່ອຄຳນີ້ໝາຍເຖິງຄວາມເສຍໃຈຢ່າງເຈັບປວດຕໍ່ຄວາມບາບ ຫຼື ຄວາມເມດຕາສົ່ງສານຕໍ່ຜູ້ຄົນທີ່ໄດ້ປະສົບກັບຄວາມຈິບຫາຍ
- ຄວາມເສຍໃຈສາມາດໝາຍເຖິງຄຳວ່າໂສກເສົ້າ ຮ້ອງໄຫ້ ຫຼື ເສຍໃຈ.

### ຄຳແນະນຳໃນການແປ

- ຄຳວ່າ " ເສຍໃຈ " ສາມາດແປໄດ້ວ່າ " ໂສກເສົ້າຢ່າງສຸດເຊິ່ງ " ຫຼື " ຮ້ອງໄຫ້ " ດ້ວຍຄວາມສະລົດໃຈ " ຫຼື ເຕັມໄປດ້ວຍຄວາມເສຍໃຈ. "
- " ຄວາມເສຍໃຈ "


generated on Thu Jul 10 08:45:04 2025

## ເສລາ

### ນິຍາມ

ຄຳວ່າ"ເສລາ"ແມ່ນຄຳ ພາສາເຮັບເຮີທີ່ເກີດຂຶ້ນສ່ວນຫຼາຍແມ່ນຢູ່ໃນພຣະທຳເພງສັນລະເສີນ. ມັນມີຄວາມໝາຍຫລາຍຢ່າງທີ່ເປັນໄປໄດ້.

- ມັນອາດມີໝາຍຄວາມວ່າ "ຢຸດແລະສັນລະເສີນ,"ເຊິ່ງຈະເຊີນຊວນໃຫ້ຜູ້ຟັງໃຫ້ຄິດຢ່າງລະມັດລະວັງກ່ຽວກັບສິ່ງທີ່ໄດ້ເວົ້າມາ.
- ເນື່ອງຈາກເພງສັນລະເສີນຫຼາຍບົດຖືກຂຽນເປັນບົດເພງ, ມັນໄດ້ຖືກຄິດວ່າ "ເສລາ" ອາດຈະແມ່ນ
  ຄຳສັບດົນຕີທີ່ຈະສັ່ງໃຫ້ນັກຮ້ອງຢຸດຊົ່ວຄາວໃນການຮ້ອງເພງຂອງລາວເພື່ອໃຫ້ເຄື່ອງດົນຕີຫຼີ້ນພຽງລຳພັງຫລືເພື່ອກະຕຸ້ນໃຫ້ຜູ້ຟັງຄິດກ່ຽວກັບເນື້ອຮ້ອງຂ

## ເສືອດາວ

### ນິຍາມ

ເສືອດາວເປັນສັດປ່າຂະໜາດໃຫຍ່ ລັກສະນະຄືກັນກັບແມວ ສີນ້ຳຕານພ້ອມດ້ວຍຈຸດສີດຳ

- ເສືອດາວເປັນສັດນັກລ້າກິນສັດອື່ນເປັນອາຫານ.
- ໃນພຣະຄຳພີ ຄວາມຈິບຫາຍທີ່ເກີດຂຶ້ນຢ່າງທັນທີທັນໃດນັ້ນຖືກປຽບທຽບເປັນດັ່ງເສືອດາວ ເຊິ່ງຈະຄຸບກິນເຫຍື່ອຍທັນທີ.
- ຜູ້ເຜີຍຖ້ອຍຄຳ ດານີເອນ ແລະ ອັກຄະສາວົກ ໂຢຮັນໄດ້ບອກກ່ຽວກັບຄວາມຝັນທີ່ພວກເຂົາເຫັນວ່າເປັນສັດປ່າທີ່ຄືກັນກັບເສືອດາວ.

## ເສື້ອຄຸມ

### ນິຍາມ

ເສື້ອຍາວແມ່ນເຄື່ອງນຸ່ງຊັ້ນນອກທີ່ມີແຂນຍາວເຊິ່ງສາມາດໃສ່ໄດ້ທັ້ງຊາຍແລະຍິງ. ມັນຄ້າຍຄືກັນກັບເປືອກຫຸ້ມນອກ.

- ເສື້ອຄຸມແມ່ນເປີດຢູ່ຫາງໜ້າ ແລະຖືກມັດດ້ວຍມັດຫລືເຂັມຂັດ.
- ພວກເຂົາສາມາດຍາວຫຼືສັ້ນໃນຄວາມຍາວ.
- ເສື້ອຄຸມສີມ່ວງໄດ້ຖືກໃສ່ໂດຍກະສັດເພື່ອເປັນເຄື່ອງ ໝາຍ ຂອງລາຊະການ, ຄວາມຮັ່ງມີ, ແລະກຽດຕິຍົດ.

## ເສື້ອຄຸມຊັ້ນໃນ

### ນິຍາມ

ໃນພຣະຄຳພີ, ຄຳວ່າ "ເສື້ອຄຸມຊັ້ນໃນ" ອ້າງເຖິງເສື້ອທີ່ສວມແນບກັບຜິວໜັງ ພາຍໃຕ້ເສື້ອອື່ນ.

- ເສື້ອຄຸມຊັ້ນໃນນັບຈາກໄຫລ່ທັ້ງສອງຂ້າງລົງໄປເຖິງແອວຫລືຫົວເຂົ່າແລະປົກກະຕິຄາດດ້ວຍເຂັມຂັດ.
  ເສື້ອຄຸມຊັ້ນໃນຈະນຸ່ງໂດຍຄົນທີ່ມີຖານະຮັ່ງມີ ບາງເທື່ອຈະມີແຂນເສື້ອແລະຍາວໄປຈົນເຖິງຂໍ້ຕີນ.
- ເສື້ອຄຸມຊັ້ນໃນເຮັດດ້ວຍໜັງສັດ, ຂົນສັດ, ຜ້າຂົນສັດ, ຫລືຜ້າປ່ານ, ໃຊ້ນຸ່ງໄດ້ທັ້ງຜູ້ຊາຍແລະຜູ້ຍິງ.
- ເສື້ອຄຸມຊັ້ນໃນ ປົກກະຕິຈະສວມພາຍໃຕ້ເສື້ອຄຸມຍາວຊັ້ນນອກ ເຊັ່ນເສື້ອພວກໂລມັນຫລືເສື້ອຄຸມ. ໃນອາກາດທີ່ອົບອ້າວ,
  ເສື້ອຄຸມຊັ້ນໃນຈະນຸ່ງໂດຍບໍ່ໃສ່ເສື້ອຄຸມດ້ານນອກ.
- ຄຳນີ້ສາມາດແປວ່າ "ເສື້ອນອກຍາວ" ຫລືເສື້ອຄຸມຍາວ" ຫລື "ເສື້ອນອກຍາວເໝືອນເສື້ອຄຸມ" ນິສາມາດຂຽນໃນວິທີຄ້າຍກັບຄຳວ່າ
  "ເສື້ອຄຸມຊັ້ນໃນ" ພ້ອມກັບຄຳອະທິບາຍວ່າເປັນເຄື່ອງແຕ່ງຕົວຊະນິດໃດ.

## ເສົາ , ເສົາຄ້ຳ

### ນິຍາມ

ຄຳວ່າ "ເສົາ" ໂດຍປົກກະຕິເວົ້າເຖິງສິ່ງກໍ່ສ້າງແນວຕັ້ງຂະໜາດໃຫຍ່ທີ່ໃຊ້ເພື່ອຄ້ຳຫຼັງຄາຫລືສ່ວນອື່ນໆ ຂອງເຮືອນ ຄຳອີກຄຳໜຶ່ງສຳລັບ "ເສົາ"
ຄື "ເສົາຄ້ຳ"

- ໃນສະໄໝຂອງພຣະຄຳພີ ເສົາຈະໃຊ້ໃນການຄ້ຳຕົກໂດຍປົກກະຕິແລ້ວຈະແກະສະລັກມາຈາກຫີນກ້ອນດຽວ
- ຕອນທີ່ແຊມຊັ່ນໃນພັນທະສັນຍາເດີມຖືກຊາວຟີລິດສະຕີນ
  ຈັບຫ່ານໄດ້ທຳລາຍວິຫານຂອງພວກນອກສາດສະໜາໂດຍການລົ້ມເສົາຫຼັກແລະເຮັດໃຫ້ວິຫານພັງ ທະລາຍລົງ


generated on Thu Jul 10 08:45:04 2025

- ຄຳວ່າ "ເສົາ"
  ບາງເທື່ອອ້າງເຖິງກ້ອນຫີນຂະໜາດໃຫຍ່ຫລືກ້ອນຫີນກົມໃຫຍ່ຊຶ່ງຕັ້ງຂຶ້ນເພື່ອເປັນອະນຸສອນເພື່ອເປັນເຄື່ອງໝາຍຂຸມຝັງສົບຫລືເພື່ອເຮັດເຄື່ອງໝາຍສະຖ
- ນອກຈາກນີ້ຍັງອ້າງເຖິງຮູບເຄົ່າລົບທີ່ສ້າງຂຶ້ນມາເພື່ອນະມັດການພະປອມ ທີ່ເອີ້ນອີກຊື່ໜຶ່ງວ່າ "ຮູບແກະສະລັກ" ແລະສາມາດແປວ່າ "ຮູບປັ້ນ"
- ຄຳວ່າ"ເສົາ"ໃຊ້ເພື່ອອ້າງເຖິງບາງສິ່ງບາງຢ່າງທີ່ມີຮູບຮ່າງຄື ເສົາ ເຊັ່ນ "ເສົາໄຟ"
  ທີ່ນຳຊາວອິດສະລາເອນຜ່ານຖິ້ນທຸລະກັນດານໃນເວລາກາງຄືນຫລື ພັນລະຍາຂອງທ່ານໂລດໄດ້ກາຍເປັນ "ເສົາເກືອ"
  ຫຼັງຈາກຫີນໆເບິ່ງກັບໄປທີ່ເມືອງ
- ໃນຖານະທີ່ເປັນສິ່ງທີ່ຄ້າຕຶກ ຄຳວ່າ"ເສົາ" ຫລື "ເສົາຄ້ຳ" ສາມາດແປໄດ້ວ່າ "ຫີນທີ່ຕັ້ງກົ່ງທີ່ຄ້ຳຄານຮັບນ້ຳໜັກ" ຫລື "ຫີນທີ່ຄ້ຳສິ່ງກໍ່ສ້າງ"
- ການໃຊ້ຄຳວ່າ "ເສົາ" ສາມາດແປໄດ້ວ່າ "ຮູບປັ້ນ" ຫລື "ເສົາເຂັ້ມ" ຫລື "ກອງ" ຫລື "ອານຸສາວະລີ" ຫລື "ກອງສູງ" ຂຶ້ນຢູ່ກັບບໍລິບົດ

## ເສົາປະຕູ

### ນິຍາມ

"ເສົາປະຕູ" ເປັນດ້ານແນວຕັ້ງ ທີ່ດ້ານຂ້າງ ຂອງປະຕູ ຊຶ່ງຮອງຮັບດ້ານເທິງ ຂອງຂອບປະຕູ.

- ກ່ອນທີ່ພຣະເຈົ້າ ຊົງໄດ້ຊ່ວຍໃຫ້ຄົນ ອິດສະຣາເອນ ຫນີອອກຈາກ ເອຢິບ ພຣະອົງ ຊົງໄດ້ສັ່ງໃຫ້ພວກເຂົາ ຂ້າລູກແກະ ແລະນຳເລືອດໄປທາໃວ້ ທີ່ເສົາປະຕູບ້ານ.
- ໃນພັນທະສັນຍາເດີມ ທາດທີ່ຕ້ອງການຮັບໃຊ້ ເຈົ້ານາຍຂອງຕົນ ໃນຊ່ວງທີ່ເຫລືອ ຂອງຊີວິດ ຈະວາງຫູໄວ້ທີ່ເສົາປະຕູບ້ານ ຂອງເຈົ້ານາຍ ເພື່ອຕອກຕະປູຜ່ານຫູ ເຂົ້າໄປໃນ ເສົາປະຕູບ້ານ.
- ນອກຈາກນີ ຍັງສາມາດແປເປັນ "ເສົາໄມ້ທີ່ດ້ານຂ້າງຂອງປະຕູ" ຫລື "ດ້ານຂ້າງຂອງຂອບປະຕູໄມ້" ຫລື ຄານໄມ້ທີ່ດ້ານຂ້າງຂອງທາງເຂົ້າປະຕູ.

## ເຫຍື່ອ, ຕາມລ່າເຫຍື່ອ

### ນິຍາມ

ຄຳວ່າ"ເຫຍື່ອ"ອ້າງເຖິງບາງສິ່ງບາງຢ່າງທີ່ຖືກລ່າ ໂດຍມັກຈະເປັນສັດທີ່ໃຊ້ເຮັດເປັນອາຫານ

- ໃນແງ່ຂອງອຸບປະມາອຸບມັຍຄຳວ່າ "ເຫຍື່ອ" ສາມາດອ້າງເຖິງບຸກຄົນທີ່ຖືກເອົາປຽບ ຖືກຂົ່ມເຫງ ຫລືຖືກກົດຂີ່ຈາກບຸກຄົນທີ່ມີອຳນາດຫລາຍກວ່າ
- ປະຊາຊົນທີ່ຕົກ "ເປັນເຫຍື່ອ" ໝາຍເຖິງຄົນຖືກເອົາປະໂຫຍດຈາກພວກທ່ານໂດຍກົດຂີ່ພວກທ່ານຫລືລັກບາງສິ່ງຈາກພວກທ່ານ
- ຄຳວ່າ "ເຫຍື່ອ" ສາມາດແປໄດ້ອີກວ່າ"ສັດທີ່ຖືກລ່າ" ຫລື "ຜູ້ທີ່ຖືກລ່າ" ຫລື "ເຫຍື່ອ"

## ເຫຼົ້າອາງຸ່ນ, ຖັງເຫຼົ້າອາງຸ່ນ, ເຫຼົ້າງຸ່ນໃໝ່

### ນິຍາມ

ໃນພຣະຄຳພີໄດ້ກ່າວໄວ້ວ່າ "ເຫຼົ້າອາງຸ່ນ" ເວົ້າເຖິງປະເພດເຄື່ອງດື່ມທີ່ມັກທຳຈາກນ້ຳໝົນລະໄມ້ທີ່ເອີ້ນກັນວ່ານ້ຳອາງຸ່ນ
ເຫຼົ້າອາງຸ່ນຈະຖືກເກັບໄວ້ໃນ " ຖົງເຫຼົ້າອາງຸ່ນ " ຊຶ່ງເປັນສິ່ງຂອງທີ່ທຳດ້ວຍໜັງສັດ.

- ຄຳທີ່ວ່າ "ເຫຼົ້າອາງຸ່ນໃໝ່" ໝາຍເຖິງນ້ຳອາງຸ່ນທີ່ກຳລັງນຳມາຈາກໝາກອາງຸ່ນແລະຍັງບໍ່ທັນໝັກ ບາງຄັ້ງຄຳວ່າ "ເຫຼົ້າອາງຸ່ນ" ໝາຍເຖິງນ້ຳອາງຸ່ນທີ່ບໍ່ໄດ້ທັນໝັກໄວ້.
- ໃນການເຮັດເຫຼົ້າອາງຸ່ນ ໝາກອາງຸ່ນໄດ້ຖືກຄັ້ນຫລືຢຽບໃນອ່າງໃຫຍ່ ເພື່ອໃຫ້ນ້ຳໝາກອາງຸ່ນອອກມາ ນ້ຳອາງຸ່ນຈະນຳໄປໝັກໄວ້ ແລະໃຫ້ເກີດມີກຶ່ນເຫຼົ້າແອນກໍຣ໌ອອກມາ.
- ໃນສະໄໝພຣະຄຳພີ ເຫຼົ້າອາງຸ່ນເປັນເຄື່ອງດື່ມປົກກະຕິໃນການຮັບປະທານອາຫານ ຊຶ່ງບໍ່ໄດ້ມີເຫຼົ້າອາງຸ່ນຫຼາຍເໝືອນປະຈຸບັນນີ.
- ກ່ອນທີ່ເຫຼົ້າອາງຸ່ນໄດ້ຖືກນຳມາໃຊ້ສຳລັບການຮັບປະທານອາຫານກໍມັກຈະປະສົມກັບນ້ຳກ່ອນຈະດື່ມ.
- ຖົງເຫຼົ້າອາງຸ່ນທີ່ເກົ່າແລ້ວແລະເປື່ອຍຈະມີຮອຍແຕກຫຼືຂາດຊຶ່ງຈະທຳໃຫ້ເຫຼົ້າອາງຸ່ນໄຫຼອອກມາ
  ຖົງເຫຼົ້າອາງຸ່ນໃໝ່ຈະອ່ອນແລະຍືດອອກ ຊຶ່ງໝາຍຄວາມວ່າມັນບໍ່ຈີກຫຼືຂາດໄດ້ງ່າຍແລະສາມາດເກັບເຫຼົ້າອາງຸ່ນໄວ້ໄດ້ເປັນຢ່າງດີ.
- ຫາກເຫຼົ້າອາງຸ່ນບໍ່ເປັນທີ່ຮູ້ຈັກໃນວັດທະນະທຳທ່ານ ກໍສາມາດແປໄດ້ວ່າ "ນ້ຳອາງຸ່ນທີ່ໝັກແລ້ວ" ຫຼື "ເຄື່ອງດື່ມໝັກທີ່ທຳຈາກໝາກໄມ້ທີ່ເອີ້ນວ່າອາງຸ່ນ" ຫຼື "ນ້ຳໝາກໄມ້ໝັກ" ( ເບິ່ງ: [ How to Translate Unknows](https://git.door.43.org/Door43/en-ta-Translate-


generated on Thu Jul 10 08:45:04 2025

vol1/src/master/content/traslate_unknown.md))

- ວິທີແປຄຳວ່າ "ຖົ່ງເຫຼົ້າອາງຸ່ນ " ສາມາດລວມເຖິງ "ຖົ່ງສຳລັບເຫຼົ້າອາງຸ່ນ" ຫຼື "ຖົ່ງເຫຼົ້າອາງຸ່ນເຮັດດ້ວຍໜັງສັດ" ຫຼື "ເຮັດດ້ວຍໜັງສັດໃຊ້ສຳລັບເຫຼົ້າອາງຸ່ນ."

## ເອກໂຣນ

### ຂໍ້ເທັດຈິງ

ເອກໂຣນເປັນເມືອງໃຫຍ່ຂອງຟີລິດສະຕິນ, ຊຶ່ງຢູ່ຫ່າງຈາກທະເລເມດິເຕຣາເນປະມານ 14 ກິໂລແມັດ.

- ວິຫານຂອງພະທຽມບາອານ - ເຊບຸບ ຕັ້ງຢູ່ທີ່ເອກໂຣນ.
- ເມືອຟີລິດສະຕິນໄດ້ຍຶດເອົາຫີບພັນທະສັນຍາ, ເຂົາເອົາໄປຍັງເມືອງອາສະໂດດ,
  ດ້ວຍສາເຫດນີ້ເອງພຣະເຈົ້າຈຶ່ງເຮັດໃຫ້ຫລາຍຄົນເຈັບປ່ວຍແລະຕາຍຢູ່ໃນເມືອງຕ່າງໆ ທີ່ຫີບພັນທະສັນຍາໄດ້ຍ້າຍໄປຕັ້ງຢູ່.
  ໃນທີ່ສຸດຄົນຟີລິດສະຕິນກໍສົ່ງຫີບພັນທະສັນຍາກັບຄືນໄປຍັງອິດສະຣາເອນ.
- ເມືອກະສັດອາຮາຊີຢາຕົກຈາກຫລັງຄາພຣະຣາຊວັງຂອງເພິນແລະໄດ້ຮັບບາດເຈັບ,
  ເພິນໄດ້ເຮັດບາບດ້ວຍການປຶກສາຈາກພະບາອານ - ຊາບຸບ ແຕ່ທ່ານເອກໂຣນວ່າເພິນຈະຕາຍຫລືບໍ່ຈາກການບາດເຈັບຂອງເພິນ.
  ຍ້ອນບາບນີ້ເອງ, ພຣະຢາເວໄດ້ກ່າວວ່າເພິນຕ້ອງຕາຍແນ່ນອນ.

## ເອຊະຣາ

### ຂໍ້ເທັດຈິງ

ເອຊະຣາເປັນປະໂຣຫິດອິດສະຣາເອນແລະຮອບຮູ້ດ້ານກົດໝາຍຂອງຄົນຢິວ
ເປັນຜູ້ຈົດບັນທຶກປະຫວັດສາດການກັບຄືນສູ່ນະຄອນເຢຣູຊາເລັມຂອງຄົນອິດສະຣາເອນ
ຈາກນະຄອນບາບີໂລນທີ່ພວກເຂົາໄດ້ຖືກຈັບໄປເປັນຊະເລີຍຢູ່ທີ່ນັ້ນເປັນເວລາເຖິງ 70 ປີ.

- ເອຊະຣາໄດ້ຈົດບັນທຶກປະຫວັດສາດຂອງຄົນອິດສະຣາເອນ ຕອນນີ້ຢູ່ໃນພຣະທຳເອຊະຣາ. ແລະລາວຍັງໄດ້ຂຽນພຣະທຳເນເຫມີຢາ,
  ຕັ້ງແຕ່ພຣະທຳເຫລັ້ມນີ້ຍັງເປັນເຫລັ້ມດຽວກັນກັບ ພຣະທຳເນເຫມີຢາ.
- ເມືອເອຊະຣາໄດ້ກັບມາຍັງນະຄອນເຢຣູຊາເລັມແລ້ວ ລາວໄດ້ສັ່ງຕັ້ງພຣະບັນຍັດຂຶ້ນໃໝ່,
  ຕັ້ງແຕ່ຕອນທີ່ຄົນອິດສະຣາເອນບໍ່ເຊື່ອຟັງພຣະບັນຍັດເລື່ອງວັນສະບາໂຕ ແລະໄດ້ແຕ່ງງານກັບຍິງທີ່ນັບຖືສາສະໜາອື່ນ.
- ເອຊະຣາຍັງໄດ້ຊ່ວຍສ້ອມແປງພຣະວິຫານທີ່ຖືກທຳລາຍໂດຍພວກບາບີໂລນຕອນທີ່ພວກເຂົາເຂົ້າຢຶດຄອງນະຄອນເຢຣູຊາເລັມ.
- ຍັງມີຊາຍອີກສອງຄົນຊື່ເອຊະຣາທີ່ຖືກເວົ້າເຖິງໃນພັນທະ ສັນຍາເດີມ.

## ເອຊາຢາ

### ຂໍ້ເທັດຈິງ

ເອຊາຢາເປັນຜູ້ປະກາດພຣະຄຳຂອງພຣະເຈົ້າຜູ້ປະກາດພຣະຄຳໃນຊ້ວງການຄອງລາດຂອງກະສັດສີ່ອົງ ຂອງ ຢູດາ ຄື :ອຸດຊີຢາ,ໂຢທາມ,ອາຮາດ,ແລະ ເຮເຊກີຢາ.

- ເຂົາໄດ້ອາໃສຢູ່ໃນກຸງເຢຣູຊາເລັມ ໃນຊ່ວງເວລາທີ່ອັດຊີເຣຍກຳລັງໂຈມຕີເມືອງຫຼວງ.ລະຫວ່າງການປົກຄອງຂອງເຫເຊກີຢາ.
- ໃນພັນທະສັນຍາເດີມພຣະຄຳເອຊາຢາເປັນຫນັງສືສຳຄັນໃນພຣະຄຳພີ.
- ເອຊາຢາຂຽນຖ້ອຍຄຳທີ່ປະກາດພຣະຄຳຫລາຍທີ່ສຸດທີ່ໄດ້ເກີດຂຶ້ນຈິງໃນຂະນະທີ່ເຂົາຍັງມີຊີວິດຢູ່.
- ເອຊາຢາເປັນທີ່ຮູ້ຈັກຈາກຖ້ອຍຄຳທີ່ປະກາດພຣະຄຳທີ່ເຂົາຂຽນກ່ຽວກັບພຣະເມຊີອາທີ່ເກີດຂຶ້ນຈິງ 700
  ປີຕໍ່ມາເມືອພຣະເຢຊູໄດ້ຊົງມີຊີວິດຢູ່ໃນໂລກນີ.
- ພຣະເຢຊູແລະສາວົກຂອງພຣະອົງໄດ້ອ້າງເຖິງຖ້ອຍຄຳທີ່ປະກາດພຣະຄຳຂອງເອຊາຢາເພືອສອນຜູ້ຄົນກ່ຽວກັບພຣະເມຊີອາ.


generated on Thu Jul 10 08:45:04 2025

## ເອຊາຣິຢາ

### ຂໍ້ເທັດຈິງ

ອາຊາຣິຢາ ເປັນຊື່ຂອງຜູ້ຊາຍຫລາຍຄົນໃນພັນທະສັນຍາເດີມ.

- ອາຊາຣິຢາ ຄົນໜຶ່ງເປັນທີ່ຮູ້ຈັກກັນດີໃນຊື່ພາສາບາບີໂລນວ່າ ອາບັນເນໂກ
  ເຂົາເປັນໜຶ່ງໃນຄົນອິສະຣາເອນຫລວງຫລາຍທີ່ມາຈາກຢູດາ ຜູ້ທີ່ຖືກຈັບໄປເປັນຊະເລີຍໂດຍກອງທັບຂອງເນບູກາດເນັດຊາ
  ແລະຖືກນຳໄປຢູ່ໃນກຸງບາບີໂລນ. ອາຊາຣິຢາແລະເພື່ອນຄົນອິສະຣາເອນຂອງລາວຄືຮາມັນຢາ
  ແລະມີຊາເອນໄດ້ປະຕິເສດທີ່ຈະນະມັດສະການກະສັດບາບີໂລນ.ດັ່ງນັ້ນພວກເຂົາຈຶ່ງຖືກໂຍນເຂົ້າເຕົາໄຟເພື່ອເປັນການລົງໂທດ,
  ແຕ່ພຣະເຈົ້າຊົງໄດ້ຄຸ້ມຄອງພວກເຂົາ ແລະພວກເຂົາບໍ່ໄດ້ຮັບບາດເຈັບໃດໆເລີຍ.
- ອຸດຊີຢາ ກະສັດຂອງຢູດາກໍໄດ້ເອີ້ນວ່າ " ອາຊາຣິຢາ " ດ້ວຍ

ອາຊາຣິຢາອີກຄົນໜຶ່ງເປັນມະຫາປະໂລຫິດໃນພັນທະສັນຍາເດີມ.

- ໃນສະໄໝຂອງຜູ້ປະກາດພຣະວັດຈະນະເຢເຣມີຢາ, ມີຊາຍຄົນໜຶ່ງຊື່ ອາຊາຣິຢາ
  ໄດ້ຊັກຊວນໃຫ້ຄົນອິສະຣາເອນບໍ່ເຊື່ອຟັງພຣະເຈົ້າໂດຍການໃຫ້ລະຖຶ້ມບ້ານເກີດຂອງຕົນເອງ.

## ເອຊາວ

### ຂໍ້ເທັດຈິງ

ເອຊາວ ເປັນລູກຝາແຝດຄົນໜຶ່ງຂອງອີຊາກກັບເຣເບກາ. ລາວເປັນລູກທີ່ເກີດກ່ອນ. ນ້ອງຊາຍຝາແຝດຂອງລາວຊື່ຢາໂຄບ.

- ເອຊາວຂາຍສິດລູກກົກໃຫ້ຢາໂຄບຜູ້ເປັນນ້ອງຊາຍເພື່ອ ປ່ຽນກັບແກງໝາກຖົ່ວແດງຜຽງຖ້ວຍດຽວ.
- ເພາະວ່າເອຊາວເປັນລູກກົກ, ອີຊາກຜໍ່ຂອງລາວຕັ້ງຄວາມຫວັງໄວ້ວ່າຈະອວຍພອນໃຫ້ລາວເປັນພິເສດ.
  ແຕ່ຢາໂຄບໄດ້ຫລອກລວງອີຊາກ ໃຫ້ຜູ້ເປັນຜໍ່ອວຍພອນຕົນເອງແທນ. ຕອນທຳອິດເອຊາວຄຽດຮ້າຍຫລາຍເອຊາວຢາກຂ້າຢາໂຄບ,
  ແຕ່ພາຍຫລັງມາເອຊາວໄດ້ໃຫ້ອະໄພແກ່ຢາໂຄບ.
- ເອຊາວມີລູກຫລານຢ່າງຫລວງຫລາຍ,
  ແລະລູກຫລານເຫລົ່ານັ້ນໄດ້ລວມກັນເຂົ້າເປັນປະຊາຊົນກຸ່ມໃຫຍ່ທີ່ອາໄສຢູ່ໃນແຜ່ນດິນການາອານ.

## ເອທິໂອເປຍ, ຊາວເອທິໂອເປຍ

### ຂໍ້ເທັດຈິງ

ເອທິໂອເປຍ ເປັນປະເທດໃນອາຟຣິກກາ ຕັ້ງຢູ່ທາງພາກໃຕ້ຂອງປະເທດເອຢິບ, ມີແມ່ນ້ຳນິນເປັນເຂດແດນທາງຕາເວັນຕົກ
ແລະທະເລແດງຢູ່ທາງທິດຕາເວັນອອກ. ຄົນທີ່ມາຈາກເອທິໂອເປຍເອີ້ນວ່າ "ຊາວເອທິໂອເປຍ."

- ເອທິໂອເປຍບູຮານຕັ້ງຢູ່ທາງໃຕ້ຂອງປະເທດເອຢິບ ແລະລວມໄປເຖິງດິນແດນທີ່ເປັນສ່ວນໜຶ່ງຂອງຫລາຍປະເທດຂອງອາຟຣິກາເຊັ່ນ
  ຊູດານ, ເອທິໂອເປຍປະຈຸບັນ, ໂຊມາເລຍ, ເຄນຢາ, ຢູການດາ, ສາທາລະນະລັດອາຟຣິກກາກາງ, ແລະ ຊາດ.
- ໃນພຣະຄຳພີ, ເອທິໂອເປຍ ລາງເທື່ອຖືກເອີ້ນວ່າ "ຄູດ" ຫລື "ນູເບຍ."
- ປະເທດເອທິໂອເປຍ(ຄູດ) ແລະເອຢິບ ມັກຈະຖືກເອີ້ນລວມ ກັນໃນພຣະຄຳພີ, ລາງເທື່ອອາດຈະເປັນເພາະວ່າປະເທດທັ້ງສອງຢູ່ຕິດກັນ
  ແລະປະຊາຊົນຂອງທັ້ງສອງປະເທດອາດຈະມີບັນພະບຸລຸດດຽວກັນ.
- ພຣະເຈົ້າຊົງໄດ້ສົ່ງຟີລິບຜູ້ປະກາດຂ່າວປະເສີດໄປຍັງທະເລ
  ຊາຍບ່ອນທີ່ລາວໄດ້ແບ່ງປັນຂ່າວປະເສີດເລື່ອງພຣະເຢຊູກັບຄົນເຫຍີຍຊາວເອທິໂອເປຍ.

## ເອນເກດີ

### ຂໍ້ເທັດຈິງ

ເອນເກດີເປັນຊື່ຂອງເມືອງທີ່ຢູ່ໃນຖິ່ນແຫ້ງແລ້ງກັນດານທາງຕາເວັນອອກສ່ຽງເໜືອຂອງນະຄອນເຢຣູຊາເລັມ.

- ເອນເກດີຕັ້ງຢູ່ທາງຝັ່ງຕາເວັນຕົກຂອງທະເລເກືອ.
- ພາກສ່ວນໜຶ່ງຂອງຊື່ໝາຍເຖິງ "ນ້ຳພຸ," ອ້າງເຖິງນ້ຳພຸທີ່ໄຫລລົງມາຈາກເມືອງໄປສູ່ທະເລ.


generated on Thu Jul 10 08:45:04 2025

- ເອນເກດີເປັນທີ່ຮູ້ຈັກດີເພາະວ່າມີໄຮ່ອະງຸ່ນທີ່ສວຍງາມແລະດິນທີ່ອຸດົມສົມບູນ, ຊຶ່ງອາດຈະເປັນຍ້ອນວ່າມ້ໍາໄດ້ຫົດດິນຕອນນັ້ນຢ່າງຕໍ່ເນື່ອງໂດຍມ້ໍາພຸນັ້ນ.
- ນິທີໝັ້ນໃນເອນເກດີຊຶ່ງດາວິດໄດ້ໜີໄປລີ້ຢູ່ເມື່ອລາວຖືກກະສັດໂຊນຕິດຕາມໄລ່ລ້ໍາ.

## ເອຟຣາທາ, ຄົນເອຟຣາທາ

### ຂ້ໍເທັດຈິງ

ເອຟຣາທາແມ່ນຊື່ຂອງເມືອງແລະແຂວງທາງພາກເໜືອຂອງອິດສະຣາເອນ. ໃນເວລາຕໍ່ມາເມືອງເອຟຣາທາໄດ້ຖືກເອີ້ນວ່າ "ເບັດເລເຮັມ" ຫລື "ເອຟຣາທາ-ເບດເລເຮັມ."

- ເອຟຣາທາແມ່ນຊື່ລູກຊາຍຄົນໜຶ່ງຂອງກາເລັບ ເມືອງເອຟຣາທາອາດຈະໄດ້ຊື່ຕາມຊື່ຂອງລາວ.
- ຄົນທີ່ມາຈາກເມືອງເອຟຣາທາຖືກເອີ້ນວ່າ "ຄົນເອຟຣາທາ."
- ໂບອາດ, ຢູ່ທວດຂອງດາວິດ, ເປັນຄົນເອຟຣາທາ.

## ເອຟຣາອິມ

### ຂ້ໍເທັດຈິງ

ເອຟຣາອິມເປັນລູກຊາຍຄົນໜຶ່ງຂອງໂຢເຊບ. ເຊື້ອສາຍຂອງລາວ, ແມ່ນເຜົ່າເອຟຣາອິມ, ແລະເປັນໜຶ່ງໃນສິບສອງເຜົ່າຂອງອິດສະຣາເອນ.

- ເຜົ່າເອຟຣາອິມເປັນໜຶ່ງໃນສິບສອງເຜົ່າຊຶ່ງຕັ້ງຢູ່ທາງພາກເໜືອຂອງອິດສະຣາເອນ.
- ລາງເທື່ອຊື່ເອຟຣາອິມຈະຖືກໃຊ້ໃນພຣະຄໍາພີເພື່ອອ້ໍາງເຖິງອານາຈັກທາງພາກເໜືອຂອງອິດສະຣາເອນ.
- ຈະເຫັນໄດ້ຢ່ໍາງແຈ່ມແຈ້ງວ່າເອຟຣາອິມເປັນພື້ນທີ່ຊຶ່ງເປັນພູ ຫລືຈ້ໍາຍພູ, ດ້ວຍເຫດນີ້ຈຶ່ງເອີ້ນວ່າ "ພູແຫ່ງເອຟຣາອິມ" ຫລື "ເນີນພູເອຟຣາອິມ."

## ເອຢິບ, ຊາວເອຢິບ

### ຂ້ໍເທັດຈິງ

ເອຢິບເປັນປະເທດໃນພາກຕາເວັນອອກສ່ຽງເໜືອຂອງທະວີບອາຟ້ໍກກາ, ທາງຕາເວັນຕົກສ່ຽງໃຕ້ຂອງແຜ່ນດິນການາອານ. ຄົນເອຢິບເປັນຄົນທີ່ມາຈາກປະເທດເອຢິບ.

- ໃນສະໄໝບູຮານ, ເອຢິບເປັນປະເທດມະຫາອໍ່ານາດແລະຮ້ັງມີ.
- ເອຢິບບູຮານແບ່ງອອກເປັນສອງພາກສ່ວນ, ເອຢິບສ່ວນລຸ່ມ(ທາງເໜືອເປັນບ່ອນທີ່ແມ່ນ້ໍານິນໄຫລລົງສູ່ທະເລ) ແລະເອຢິບສ່ວນເທິງ(ທາງໃຕ້). ໃນພັນທະສັນຍາເດີມ, ສ່ວນຕ່ໍາງໆ ເຫລົ່ານີ້ຖືກເວ້ົາເຖິງວ່າເປັນ "ເອຢິບ" ແລະ "ປັດໂຣດ" ໃນພາສາຕົ້ນສະບັບດ້ັງເດີມ.
- ຫລາຍເທື່ອ ເມື່ອເກີດການອຶດອາຫານໃນການອານ, ຍັນພະບຸລຸດອິດສະຣາເອນໄດ້ເດີນທາງໄປປະເທດເອຢິບເພື່ອຊື້ອາຫານສໍາລັບຄອບຄົວຂອງເຂົ່ໍາເຈ້ົ່າ.
- ເປັນເວລາຫລາຍຮ້ອຍປີ, ຄົນອິດສະຣາເອນຕົກເປັນທາດໃນເອຢິບ.
- ໂຢເຊບກັບມາຣີອາ ໄດ້ໄປເອຢິບພ້ອມກັບພຣະກຸມມານເຢຊູ, ເພື່ອປ້ົ່ອງກັນຈາກກະສັດເຮໂຣດ.

## ເອລາມ

### ຂ້ໍເທັດຈິງ

ເອລາມເປັນລູກຊາຍຂອງເຊມແລະເປັນຫລານຂອງໂນອາ.

- ເຊື້ອສາຍຂອງເອລາມເອີ້ນວ່າ "ເອລາມ" ແລະເຂົ່ໍາເຈ້ົ່າອາໄສຢູ່ໃນພື້ນທີ່ທີ່ເອີ້ນວ່າ "ເອລາມ."
- ພື້ນທີ່ຂອງເອລາມຕັ້ງຢູ່ທາງຕາເວັນອອກສ່ຽງໃຕ້ຂອງແມ່ນ້ໍາ ຕິກຣິດ, ປະຈຸບັນນີ້ແມ່ນທາງຕາເວັນຕົກຂອງປະເທດອີຫລ່ານ.


generated on Thu Jul 10 08:45:04 2025

## ເອລີຊາ

### ຂໍ້ເທັດຈິງ

ເອລີຊາເປັນຜູ້ປະກາດພຣະທຳໃນອິດສະຣາເອນໃນຫລາຍສະໄໝຂອງກະສັດອິດສະຣາເອນຊຶ່ງໄດ້ແກ່: ອາຮາບ, ອາຮາຊີຢາ, ເຢໂຮຣາມ, ເຢຮູ, ເຢໂຮອາຮາດ, ແລະເຢໂຮອາດ.

- ພຣະເຈົ້າໄດ້ເວົ້າກັບຜູ້ປະກາດພຣະທຳເອລີຢາວ່າ ໃຫ້ເຈີມແຕ່ງຕັ້ງເອລີຊາເປັນຜູ້ປະກາດພຣະທຳ.
- ເມື່ອເອລີຢາຖືກຮັບຂຶ້ນໄປສະຫວັນໂດຍລົດມ້າໄຟແລ້ວ,
  ເອລີຊາກໍໄດ້ເປັນຜູ້ປະກາດພຣະທຳຂອງພຣະເຈົ້າທ່ານກາງບັນດາກະສັດອິດສະຣາເອນ.
- ເອລີຊາໄດ້ເຮັດການອັດສະຈັນຫລາຍຢ່າງ, ລວມທັງການປຶ້ນປົ່ວຜູ້ຊາຍຄົນໜຶ່ງທີ່ເປັນຂີ້ທູດຈາກປະເທດຊີເຣຍໃຫ້ຫາຍດີ
  ແລະເຮັດໃຫ້ລູກຊາຍຂອງຍິງຄົນໜຶ່ງໃນເມືອງຊູເນມຄືນມາຈາກຕາຍ.

## ເອລີຊາເບັດ

### ຂໍ້ເທັດຈິງ

ເອລີຊາເບັດເປັນແມ່ຂອງໂຢຮັນຜູ້ໃຫ້ບັບຕິສະມາ. ຜົວຂອງນາງຊື່ເຊຂາຣີຢາ.

- ເຊຂາຣີຢາແລະເອລີຊາເບັດບໍ່ເຄີຍມີລູກ, ແຕ່ເມື່ອທັງສອງເຖົ້າແກ່ແລ້ວ,
  ພຣະເຈົ້າໄດ້ສັນຍາກັບເຊຂາຣີຢາວ່າເອລີຊາເບັດຈະເກີດລູກຊາຍຄົນໜຶ່ງ.
- ພຣະເຈົ້າໄດ້ຮັກສາຄຳສັນຍາຂອງພຣະອົງ, ແລະອີກບໍ່ດົນເຊຂາຣີຢາແລະເອລີຊາເບັດກໍຈະມີລູກຊາຍ, ແລະນາງຈະໄດ້ຕັ້ງທ້ອງ.
  ແລະໃຫ້ຊື່ເດັກນ້ອຍນັ້ນວ່າໂຢຮັນ.
- ເອລີຊາເບັດເປັນພີ່ນ້ອງກັນກັບມາຣີອາ, ແມ່ຂອງພຣະເຢຊູ.

## ເອລີຢາ

### ຂໍ້ເທັດຈິງ

ເອລີຢາເປັນຜູ້ປະກາດພຣະທຳທີ່ສຳຄັນທີ່ສຸດຄົນໜຶ່ງຂອງພຣະເຈົ້າຢາເວ.
ເອລີຢາໄດ້ປະກາດພຣະທຳໃນຊ່ວງຫລາຍສະໄໝຂອງກະສັດອິດສະຣາເອນຫລືຢູດາ, ລວມທັງກະສັດອາຮາບ.

- ພຣະເຈົ້າໄດ້ເຮັດການອັດສະຈັນຢ່າງຫລວງຫລາຍຜ່ານທາງເອລີຢາ,
  ລວມທັງການເຮັດໃຫ້ເດັກຊາຍຄົນໜຶ່ງທີ່ຕາຍແລ້ວກັບຄືນມາມີຊີວິດອີກ.
- ເອລີຢາໄດ້ຕຳນິກະສັດອາຮາບທີ່ນະມັດສະການພະທຽມເທັດ ບາອານ.
- ເພິ່ນໄດ້ທ້າທາຍຜູ້ປະກາດພຣະທຳຂອງພະບາອານໃຫ້ທົດສອບເພື່ອຈະພິສູດໃຫ້ເຫັນວ່າ
  ພຣະຜູ້ເປັນເຈົ້າເປັນພຣະເຈົ້າອົງດຽວເທົ່ານັ້ນ.
- ໃນຍັນປາຍຊີວິດຂອງເອລີຢາ, ພຣະເຈົ້າໄດ້ຮັບເອົາເພິ່ນຂຶ້ນໄປສະຫວັນຢ່າງອັດສະຈັນໃນຂະນະທີ່ເພິ່ນຍັງມີຊີວິດຢູ່.
- ຫລາຍຮ້ອຍປີຕໍ່ມາເອລີຢາ, ພ້ອມດ້ວຍໂມເຊ, ໄດ້ປາກົດຕົວພ້ອມກັບພຣະເຢຊູຢູ່ເທິງພູ
  ແລະພວກເພິ່ນໄດ້ໂອ້ລົມກັນກ່ຽວກັບຄວາມທຸກທໍລະມານແລະຄວາມຕາຍທີ່ຈະມາເຖິງພຣະເຢຊູໃນນະຄອນເຢຣູຊາເລັມ.

## ເອລີອາກິມ

### ຂໍ້ເທັດຈິງ

ເອລີອາກິມແມ່ນຊື່ຂອງຊາຍສອງຄົນໃນພັນທະສັນຍາເດີມ.

- ຊາຍຄົນໜຶ່ງຊື່ເອລີອາກິມເປັນຜູ້ຈັດການພາຍໃຕ້ກະສັດເຮເຊກີຢາ.
- ຊາຍອີກຄົນໜຶ່ງຊື່ເອລີອາກິມເປັນລູກຊາຍຂອງກະສັດໂຢສີຢາ. ເພິ່ນເປັນກະສັດຂອງຢູດາ. ໂດຍ ເນໂກ ຟາໂຣ, ປະເທດເອຢິບ.
- ເນໂກ ໄດ້ປ່ຽນຊື່ເອລີອາກິມເປັນເຢໂຮຍອາກິມ.


generated on Thu Jul 10 08:45:04 2025

## ເອວາ

### ຂໍ້ເທັດຈິງ

ນີ້ແມ່ນຊື່ຂອງຜູ້ຍິງຄົນທຳອິດ. ຊື່ຂອງລາວມີຄວາມໝາຍວ່າ "ຊີວິດ" ຫລື "ມີຊີວິດ."

- ພຣະເຈົ້າຊົງໄດ້ສ້າງເອວາຂຶ້ນມາຈາກກະດູກຂ້າງທີ່ພຣະອົງດຶງອອກມາຈາກອາດາມ.
- ເອວາໄດ້ຖືກສ້າງມາໃຫ້ເປັນ "ຜູ້ຊ່ວຍ." ຂອງອາດາມ
  ນາງໄດ້ຢູ່ຄຽງຂ້າງອາດາມເພື່ອຊ່ວຍລາວໃນງານທີ່ພຣະເຈົ້າມອບໝາຍໃຫ້ພວກເຂົາເຮັດ.
- ເອວາໄດ້ຖືກມານຊາຕານຫລອກລວງ(ໃນຮູບແບບຂອງງູ)
  ແລະນັ້ນແມ່ນການເຮັດບາບເທື່ອທຳອິດໂດຍການກິນໝາກໄມ້ທີ່ພຣະເຈົ້າຫ້າມບໍ່ໃຫ້ກິນ.

## ເອສະເທ

### ຂໍ້ເທັດຈິງ

ເອສະເທ ເປັນຍິງຊາວຢິວທີ ໄດ້ເປັນຣາຊິນີແຫ່ງຣາຊອານາຈັກເປີເຊຍ
ໃນຊ່ວງເວລາທີ ພວກຢິວຖືກກວາດຕ້ອນໄປເປັນຊະເລີຍໃນປະເທດບາບີໂລນ.

- ພຣະທຳເອສະເທ ໄດ້ເລົ່າເລື່ອງລາວຂອງເອສະເທ ທີ ນາງໄດ້ກາຍເປັນຣາຊິນີຂອງເຊເຊັດກະສັດເປີເຊຍ
  ແລະວິທີ ທີ ພຣະເຈົ້າ ໄດ້ ໃຊ້ ນາງ ໃຫ້ ຊ່ວຍ ປະຊາຊົນ ຂອງ ນາງ.
- ເອສະເທ ເປັນ ລູກ ກຳພ້າ ທີ ມໍເດໄກ ຊຶ ເປັນ ພີ ນ້ອງ ຜູ້ ສູງ ອາຍຸ ທີ ມີ ຄວາມ ເຊື ອ ໃນ ພຣະເຈົ້າ, ໄດ້ ເອົາ ມາ ລ້ຽງ.
- ຍ້ອນ ວ່າ ນາງ ເຊື ອ ຟັງ ມໍເດໄກ ຜໍ ລ້ຽງ ຂອງ ນາງ ຈຶ ງ ຊ່ວຍ ໃຫ້ ຫ ນາງ ມີ ຄວາມ ເຊື ອ ໃນ ພຣະເຈົ້າ.
- ເອສະເທ ໄດ້ ເຊື ອ ຟັງ ພຣະເຈົ້າ ແລະ ໄດ້ ສ່ຽງ ຊີ ວິດ ເພື ອ ຊ່ວຍ ພວກ ຢິ ວ, ທີ ເປັ ນ ຊົ ນ ຊາດ ຂອງ ນາງ.
- ເລື ອ ງ ລາວ ຂອງ ເອສະເທ ຊີ ໃຫ້ ເຫັ ນ ເຖິ ງ ການ ຄຸ ້ ມ ຄອງ ຂອງ ພຣະເຈົ້າ ທີ ຢູ ່ ເໜື ອ ເຫ ດ ການ ໃນ ປະ ຫ ວັ ດ ສາ ດ, ໂ ດ ຍ ສະ ເ ພ າ ະ ແ ລ ້ ວ ແ ມ ່ ນ ວິ ທ ີ ທ ີ ພ ຣ ະ ອ ົ ງ ປ ົ ກ ຄ ອ ງ ໄ ພ ່ ພ ົ ນ ຂ ອ ງ ພ ຣ ະ ອ ົ ງ ແ ລ ະ ໄ ດ ້ ທ ຳ ງ ານ ຜ ່ ານ ຜ ູ ້ ທ ີ ເ ຊ ື ອ ຟ ັ ງ ພ ຣ ະ ອ ົ ງ.

## ເອີນ, ການເອີນ, ໄດ້ຮັບການເອີນ, ເອີນອອກມາ

### ນິຍາມ

ຄຳວ່າ "ເອີນ"ແລະ "ເອີນອອກມາ" ມີຄວາມໝາຍຕາມສ່ານຽງສຽງເອີນຄ່ອຍຕໍ່ຜູ້ຢູ່ໃກ້, ເອີນສຽງດັງຕໍ່ຜູ້ຢູ່ຫ່າງໄກ ແລະຍັງມີຄວາມໝາຍ
ອື ນ ໆ ອີ ກ.

- ຄຳ ວ່ າ "ເ ອ ີ ນ ອ ອ ກ ມ າ" ມ ີ ຄ ວ າ ມ ໝ າ ຍ ວ ່ າ ຮ ້ ອ ງ ດ ້ ວ ຍ ສ ຽ ງ ດ ັ ງ ກ ັ ບ ຜ ູ ້ ຢ ູ ່ ຫ ່ າ ງ ໄ ກ ໃ ຫ ້ ອ ອ ກ ມ າ. ຄ ຳ ດ ຽ ວ ກ ັ ນ ນ ີ ້ ຍ ັ ງ ມ ີ ຄ ວ າ ມ ໝ າ ຍ ວ ່ າ ເ ອ ີ ນ ມ າ ໃ ຫ ້ ຊ ่ ວ ย ໂ ด ย ส ะ เ พ า ะ แ ม ่ น ร ้ อ ง ข ้ อ ค ว า ม ช ่ ว ย เ ห ล ื อ จ า ก พ ร ะ เ จ ้ า.
- ເ ຫ ັ ນ ໃ ນ ພ ຣ ะ ຄ ຳ ພ ີ ห ล า ย เ ห ื อ เ ห ็ น ค ำ ว ่ า "ເ ອ ີ ນ" ม ี ค ว า ม ห ม า ย ว ่ า เ ป ็ น ค ำ ส ั ่ ง ห ร ื อ ค ำ ข ้ อ ร ้ อ ง.
- ພ ຣ ะ ເ ຈ ົ ้ า ช ົ ง เ อ ີ ນ ค น ท ั ้ ง ห ล า ย ใ ห ้ ม า ห า พ ร ะ อ ົ ง เ พ ื อ เ ป ็ น ป ะ ช า ช ົ น ข อ ง พ ร ะ อ ົ ง แ ม ่ น ใ ช ้ ค ำ ว ่ า "ເ ອ ີ ນ ອ ອ ກ ມ า"
- ค ำ ว ่ า "ช ົ ง เ อ ี ม" ท ี ่ ใ ช ้ ใ น พ ร ะ ค ำ พ ี ห ม า ย เ ถ ิ ง พ ร ะ เ จ ้ า ช ົ ง แ ต ่ ง ต ั ้ ง ห ล ื อ เ ล ื อ ก ใ ห ้ เ ป ็ น ล ู ก ข อ ง พ ร ะ อ ົ ง, ช ົ ง เ อ ี ม ใ ห ้ เ ป ็ น ผ ู ้ ร ั บ ใ ช ้ พ ร ะ อ ົ ง, เ ป ็ น ผ ู ้ ป ะ ก า ศ พ ร ะ ค ำ แ ห ่ ง ค ว า ม ร อ ด พ ้ น ท ี ่ ม ี ใ น พ ร ะ เ ย ซ ู.
- ค ำ น ี ้ ย ั ง ใ ช ้ บ า ง ก ໍ ร ะ ນ ี อ า ด แ ป ว ่ า เ อ ี ม ผ ู ้ ใ ด ผ ู ้ ห ນ ึ ง ก ็ ต ิ อ ย ่ า ง "ล า ว ถ ู ก เ อ ี ม ช ื ่ อ ว ่ า ໂ ย ຮ ັ ນ ໝ ายถ ึ ง ว ่ า ล า ว ช ื ่ ໂ ย ຮ ັ ນ.
- ก า ร ถ ู ก "ເ อ ี ม อ อ ก ช ื ่ อ" ห ม า ย ถ ึ ง ว ่ า ผ ู ้ ใ ด ผ ู ้ ห ນ ึ ง ถ ู ก เ อ ี ม ส ะ เ พ า ะ เ จ า ะ จ ง. พ ร ะ เ จ ้ า ช ົ ง เ อ ี ม ป ะ ช า ก อ บ พ ร ะ อ ົ ง โ ด ย อ อ ก ช ื ่ อ ผ ู ้ น ั ้ น.
- ก า ร ถ ู ก เ อ ี ม แ บ บ ห ນ ึ ง " ข ้ อ ย เ อ ี ม อ อ ก ช ื ่ อ เ จ ้ า" ห ม า ย ถ ึ ง ว ่ า พ ร ะ เ จ ้ า ร ู ้ จ ั ก ช ื ่ อ ผ ู ้ น ั ้ น แ ล ะ เ อ ี ม ม า เ ล ื อ ก เ อ ົ า ล า ว.

ຄ ຳ ແ ນ ะ ນ ຳ ໃ ນ ກ ານ ແ ປ

- ค ำ ว ่ า "ເ อ ี ม" ส า ม า ถ แ ป ไ ด ้ ว ่ า ก า ร ถ ຽ ว ก ต ิ อ ห ร ื อ ถ ຽ ว ก ร ้ อ ง ร ว ม เ ถ ิ ง ค ว า ม ค ิ ด ต ้ ง ใ จ จ ะ เ อ ี ม แ ม ว น ั ้ น.
- ค ำ ว ่ า "ເ อ ี ม ห า เ จ ้ า" อ า จ แ ป ไ ด ้ ว ่ า "ข ໍ ใ ห ้ เ จ ้ า ช ่ ว ย" ห ร ื อ ร ้ อ ง ข ໍ ค ว า ม ช ่ ว ย เ ห ล ื อ อ ย ่ า ม ส ุ ก เ ส ี ย น.
- เ ว ล า พ ร ะ ค ำ พ ี เ ว ้ า ว ่ า "ช ົ ง เ อ ี ม" เ ร า ใ ช ้ เ ป ็ น ผ ู ้ ร ั บ ใ ช ้ ส า ม า ถ แ ป ไ ด ้ ว ่ า "ช ົ ง เ ล ื อ ก เ ร า ไ ว ้ อ ย ่ า ง พ ิ เ ศ ษ" ห ร ื อ "ช ົ ง แ ต ่ ง ต ั ้ ง" ใ ห ้ เ ป ็ น ผ ู ้ ร ั บ ใ ช ้.
- เ จ ้ า ต ้ อ ง ร ้ อ ง อ อ ก พ ร ะ น า ม พ ร ะ อ ົ ง ย ั ง แ ป ว ่ า ร ้ อ ง อ อ ก น า ม ช ื ่ อ พ ร ะ อ ົ ง.
- พ ร ะ น า ม ข อ ง พ ร ะ อ ົ ง อ า จ แ ป ว ่ า พ ร ะ อ ົ ง ช ົ ง พ ร ะ น า ม ว ่ า.
- ก า ร "ເ อ ี ม อ อ ก ม า" แ ป ว ่ า เ อ ี ม ด ้ ว ย ส ຽ ง ด ั ง ห ร ื อ ร ้ อ ง แ ຮ ง ๆ ห ร ื อ เ ว ้ า ส ຽ ง ด ั ง ๆ แ ต ่ บ ໍ ่ แ ม ่ น ร ้ อ ง แ บ บ ใ จ ร ้ า ย.
- ค ำ เ ว ้ า อ ี ก ค ำ ห ນ ึ ง "ก า ร ช ົ ง เ อ ี ม ข อ ง พ ร ะ เ จ ้ า" อ า จ แ ป ว ่ า "พ ร ะ ป ะ ส ົ ง ข อ ง พ ร ะ เ จ ้ า ส ำ ล ั บ เ จ ้ า" ห ร ื อ "พ ร ะ เ จ ้ า ม ี ง า น พ ิ เ ศ ษ ใ ห ้ เ จ ้ า"


generated on Thu Jul 10 08:45:04 2025

- ຮ້ອງອອກພຣະນາມພຣະເຈົ້າ ອາດແປວ່າສະແຫວງຫາອົງພຣະຜູ້ເປັນເຈົ້າແລະເພິ່ງໃນພຣະຄຸນພຣະອົງ ຫລືເຊື່ອແລະວາງໃຈໃນອົງພ ຣະຜູ້ເປັນເຈົ້າ.
- ຄຳວ່າ "ຮຽກຮ້ອງ" ອາດແປໄດ້ວ່າສັ່ງການ ຫລືຮ້ອງຂໍ.
- ຄຳເວົ້າອີກຄຳນຶ່ງ " ເຈົ້າໄດ້ຮ້ອງອອກນາມຊື່ຂອງເຮົາ" ອາດແປໄດ້ວ່າ ເຮົາໄດ້ໃຫ້ເຈົ້າໃຊ້ຊື່ຂອງເຮົາ ເພື່ອບອກໃຫ້ຮູ້ວ່າເຈົ້າເປັນຂອງ ເຮົາ.
- ເມື່ອພຣະເຈົ້າຊົງກ່າວວ່າ "ເຮົາໄດ້ເອີ້ນເຈົ້າໂດຍຊື່ຂອງເຈົ້າ" ອາດແປວ່າເຮົາຮູ້ຊື່ເຈົ້າ ແລະເຮົາເລືອກເອົາເຈົ້າ.

## ເອີ

### ຂ້ເທັດຈິງ

ເອີ ເປັນເມືອງທີ່ມີຄວາມສຳຄັນທາງແຖບແມ່ນ້ຳຢູ່ເຟຕິດໃນເຂດບູຮານຂອງເຄນເດ, ຊຶ່ງເຄີຍເປັນສ່ວນໜຶ່ງຂອງເມໂຊໂປຕາເມ. ເຂດນີ້ຕັ້ງຢູ່ໃນພື້ນທີ່ຂອງປະເທດອີຣັກໃນປະຈຸບັນ.

- ອັບຣາຮາມມາຈາກເມືອງເອີແລະຈາກບ່ອນນັ້ນເພຣະພຣະເຈົ້າຊົງເອີ້ນໃຫ້ທ່ານຈາກໄປຢັງແຜ່ນດິນການນາອານ.
- ຮາຣານ ນ້ອງຊາຍຂອງອັບຣາຮາມແລະເປັນພ່ໍຂອງໂລດ, ເພິນໄດ້ສິນຊີວິດໃນເມືອງເອີ.
ນິບາງທີ່ອາດຈະເປັນສາເຫດເຮັດໃຫ້ໂລດຈາກເມືອງເອີ ໄປກັບອັບຣາຮາມ.

## ເອື້ອຍ/ນ້ອງສາວ

### ນິຍາມ

ເອື້ອຍ/ນ ້ອງສາວ ຄືຜ ູ້ຍ ິງທ ີ່ມ ີບ ິດາມ ານດ ຽວກ ັບອ ີກຄ ົນໜ ຶ່ງ.

- ໃນພັນທະສັນຍ າໃໝ່, ຄ ຳວ ່າ"ເອ ື້ອ ຍ/ນ ້ອ ງສ າວ" ຍ ັງເປ ັນຄ ຳປ ຽບເປ ີຍທ ີ່ອ ้າງເຖ ິງຜ ู້ຍ ິງທ ີ່ຕ ິດຕ າມພ ຣະເຢ ຊ ູຄ ຣິດ.
- ບ າງເທ ື່ອຄ ຳເວ ົ້າວ ່າ, "ອ ້າຍແ ລະນ ້ອ ງສ າວ" ໃ ຊ້ອ ้າງເຖ ິງເຫ ລ ົ່າຜ ู້ເຊ ື່ອໃ ນພ ຣະຄ ຣິດ, ທ ັ້ງໝ ົດທ ັ້ງຜ ู້ຊ າຍແ ລະຜ ู້ຍ ິງ.
- ໃນພ ะຄ ຳພ ີພ າກພ ັນທ ะສ ັນຍ າເດ ິມ, ບ ິດເພ ງໂຊ ໂລ ໂມ ນ ຄ ຳວ ່າ, "ເອ ື້ອ ຍ/ນ ້ອ ງສ າວ" ອ ้າງເຖ ິງຄ ົນຮ ັກຫ ລ ືຄ ູ່ສ ົມຣ ິດ.

### ຄຳແນະນຳໃນການແປ

- ເປັນວ ິທ ີທ ີ່ດ ີທ ີ່ສ ຸດທ ີ່ຈ ະແປຄ ຳນ ີ້ຕ າມຕ ົວອ ັກສ ອ ນທ ີ່ໃ ຊ້ໃ ນພ າສ າທ ີ່ແ ປເພ ື່ອອ ้າງເຖ ິງນ ้ອ ງສ າວທ ີ່ເກ ີດຈ າກທ ้ອ ງແ ມ่ດ ຽວກ ັນ, ນອ ກຈ າກວ ່ານ ີ້ຈ ະເຮ ັດໃ ຫ້ຄ ວ າມໝ າຍຜ ິດໄ ປ.
- ວ ິທ ີອ ื່ນທ ີ່ຈ ະແປຄ ຳນ ີ້ທ ັ້ງໝ ົດເຖ ິງ, "ເອ ື້ອ ຍຫ ລ ືນ ້ອ ງສ າວໃ ນພ ะຄ ຣິດ" ຫ ລ ື "ນ ້ອ ງສ າວແ ຫ່ງຈ ິດວ ິນຍ ານ" ຫ ລ ື "ຜ ู້ຍ ິງທ ີ່ເຊ ື່ອໃ ນພ ຣະເຢ ຊ ู" ຫ ລ ື "ບ ັນດ າຜ ู້ຍ ິງທ ີ່ເປ ັນຜ ู້ເຊ ື່ອ."
- ຖ້າເປ ັນໄ ດ້, ວ ິທ ີທ ີ່ດ ີທ ີ່ສ ຸດຄ ืກ ານໃ ຊ້ຄ ຳທ ີ່ກ ່ຽວກ ັບຄ ອ ບຄ ົວ.
- ຖ້າພ າສ າທ ີ່ມ ີຄ ຳຮ ູບແ ບບຜ ู້ຍ ິງສ ຳລ ັບ "ຜ ู້ເຊ ື່ອ," ນ ີອ າດເປ ັນວ ິທ ີທ ີ່ເປ ັນໄ ປໄ ດ້ທ ີ່ຈ ະແ ປຄ ຳນ ີ.
- ເມ ື່ອອ ้າງເຖ ິງຄ ູ່ຮ ັກຫ ລ ື ພ ັນລ ะຍ າ ນ ີສ າມ າດແ ປໂດ ຍໃ ຊ້ຮ ູບແ ບບທ ີ່ເປ ັນຜ ู້ຍ ິງສ ຳລ ັບ "ຄ ົນທ ີ່ຮ ັກ" ຫ ລ ື "ຄ ົນຮ ັກ."

## ເອເຊກຽນ

### ຂ້ເທັດຈິງ

ເອເຊກຽນເປັນຜ ູ້ປະກ າດພ ຣະທ ຳຂ ອ ງພ ຣະເຈ ົ້າໃ ນຊ ่ວ ງເວ ລ າທ ี่ຖ ຶກເນ ລ ะເທ ດ
ເມ ື່ອຄ ົນຍ ິວຈ ຳນ ວ ນຫ ລ າຍຖ ຶກກ ວ າດຕ ้ອ ນໄ ປຍ ັງນ ะຄ ອ ນບ າບ ີໂ ລ ນ.

- ເອ ເຊ ກ ຽ ນແ ມ່ນ ປ ະ ໂ ຣ ຫ ິ ດ ຄ ົ ນ ໜ ຶ່ງ ຫ ື ອ າ ໄ ສ ຢ ູ່ໃ ນ ອ ານ າ ຈ ັ ກ ຢ ູ ດ າ ເ ມ ື່ອ ລ າ ວ ແ ລ ະ ບ ັ ນ ດ າ ຄ ົ ນ ຍ ິ ວ ຖ ຶ ກ ຈ ັ ບ ໄ ປ ໂ ດ ຍ ກ ອ ງ ທ ັ ບ ບ າ ບ ີ ໂ ລ ນ.
- ເປ ັ ນ ເ ວ ລ າ ຫ ລ າ ຍ ກ ວ ່ າ ຊ າ ວ ປ ີ, ເ ອ ເ ຊ ກ ຽ ນ ແ ລ ະ ເ ມ ຍ ຂ ອ ງ ລ າ ວ ໄ ດ້ອ າ ໄ ສ ຢ ູ່ໃ ນ ນ ະ ຄ ອ ນ ບ າ ບ ີ ໂ ລ ນ ໃ ກ້ກ ັ ບ ແ ມ່ນ ້ ຳ,
ແ ລ ະ ຄ ົ ນ ຍ ິ ວ ໄ ດ້ມ າ ຫ າ ລ າ ວ ເ ພ ື່ອ ຟ ັ ງ ຖ ้ອ ຍ ຄ ຳ ຈ າ ກ ພ ຣ ะ ເ ຈ ົ້າ.
- ຖ ่ ຳ ມ ກ າ ງ ສ ື ງ ຍ ື ນ ໆ, ເ ອ ເ ຊ ກ ຽ ນ ໄ ດ້ທ ຳ ນ ວ າ ຍ ເ ລ ື ອ ງ ກ ານ ທ ຳ ລ າ ຍ ແ ລ ະ ກ ານ ສ ັ ອ ມ ແ ປ ງ ນ ະ ຄ ອ ນ ເ ຢ ຣ ູ ຊ າ ເ ລ ັ ມ ແ ລ ະ ພ ຣ ະ ວ ິ ຫ ານ.
- ລ າ ວ ໄ ດ້ທ ຳ ນ ວ າ ຍ ພ ຣ ะ ທ ຳ ເ ຖ ິ ງ ອ ານ າ ຈ ັ ກ ຂ ອ ງ ພ ຣ ะ ເ ມ ຊ ີ ອ າ ໃ ນ ອ ะ ນ າ ຄ ົ ດ ອ ີ ກ ດ້ວ ຍ.


generated on Thu Jul 10 08:45:04 2025

## ເອເດນ, ສວນເອເດນ

### ຂໍ້ເທັດຈິງ

ໃນສະໄໝບູຮານ, ເອເດນເປັນພື້ນທີ່ທີ່ມີສວນພຣະເຈົ້າຊຶ່ງໃຫ້ຊາຍແລະຍິງຄູ່ທຳອິດອາໄສຢູ່.

- ສວນທີ່ອາດາມແລະເອວາອາໄສຢູ່ເປັນພຽງສ່ວນໜຶ່ງຂອງເອເດນເທົ່ານັ້ນ.
- ບ່ອນຢູ່ທີ່ແນ່ນອນຂອງບໍລິເວນເອເດນນັ້ນບໍ່ແນ່ນອນ, ແຕ່ວ່າແມ່ນ້ຳຕິກຣິດແລະແມ່ນເອີຟຣັດໄຫລຜ່ານທີ່ນີ້.
- ຄຳວ່າ "ເອເດນ" ມາຈາກຄຳພາສາເຮັບເຣີທີ່ມີຄວາມໝາຍວ່າ "ນ່ານໆຊຶ່ງຄວາມຊົມຊື່ນຍິນດີ."

## ເອເຟໂຊ

### ຂໍ້ເທັດຈິງ

ເມືອງເອເຟໂຊເປັນເມືອງກຣີກບູຮານທີ່ຕັ້ງຢູ່ທາງຝັ່ງຕາເວັນຕົກຊຶ່ງປະຈຸບັນແມ່ນປະເທດຕຸລະກີ.

- ໃນຍຸກສະໄໝເລີ່ມຕົ້ນຂອງຄຣິສຕຽນ, ເອເຟໂຊເປັນເມືອງຫລວງຂອງເອເຊຍຊຶ່ງເປັນແຂວງນ້ອຍໆ, ຂອງຊາວໂຣມັນໃນເວລານັ້ນ.
- ເພາະສະຖານທີ່ຕັ້ງຂອງເມືອງ, ເມືອງນີ້ຈຶ່ງເປັນສູນກາງການຄ້າຂາຍແລະທ່ອງທ່ຽວທີ່ສຳຄັນ.
- ວິຫານຂອງຄົນຕ່າງຊາດທີ່ຮູ້ຈັກກັນດີສຳລັບການນະມັດສະການ ພະອາເຕມິດ(ໄດອານາ) ຕັ້ງຢູ່ໃນເມືອງເອເຟໂຊ.
- ໂປໂລໄດ້ອາໄສແລະເຮັດງານຢູ່ໃນເມືອງເອເຟໂຊຫລາຍກວ່າສອງປີ
  ແລະພາຍຫລັງຈຶ່ງໄດ້ແຕ່ງຕັ້ງຕີໂມທຽວເພື່ອນຳພາຜູ້ເຊື່ອໃໝ່ຢູ່ທີ່ນັ້ນ.
- ພຣະທຳເອເຟໂຊໃນພັນທະສັນຍາໃໝ່ແມ່ນຈົດໝາຍທີ່ໂປໂລໄດ້ຂຽນໄປເຖິງບັນດາຜູ້ທີ່ເຊື່ອໃນເມືອງເອເຟໂຊ.

## ເອເລອາຊາ

### ຂໍ້ເທັດຈິງ

ເອເລອາຊາແມ່ນຊື່ຂອງຜູ້ຊາຍຫລາຍຄົນໃນພຣະຄຳພີ.

- ເອເລອາຊາເປັນລູກຊາຍຄົນທີ່ສາມຂອງອາໂຣນຜູ້ເປັນອ້າຍຂອງໂມເຊ. ຫລັງຈາກອາໂຣນຕາຍໄປແລ້ວ,
  ເອເລອາຊາກໍໄດ້ເປັນມະຫາປະໂຣຫິດໃນອິດສະຣາເອນ.
- ເອເລອາຊາຍັງເປັນຊື່ຂອງ "ນັກຮົບຜູ້ເກັ່ງກ້າອາດຫານ." ຂອງດາວິດ
- ເອເລອາຊາອີກຄົນໜຶ່ງ ເປັນໜຶ່ງໃນບັນພະບຸລຸດຂອງພຣະເຢຊູ.

## ເອໂດມ, ຊາວເອໂດມ, ອີດູເມຍ

### ຂໍ້ເທັດຈິງ

ເອໂດມແມ່ນອີກຊື່ໜຶ່ງຂອງເອຊາວ. ພື້ນດິນທີ່ລາວອາໄສຢູ່ເປັນທີ່ຮູ້ຈັກກັນໃນຊື່ວ່າ "ເອໂດມ" ແລະພາຍຫລັງມາ, ໄດ້ເອີ້ນວ່າ "ອີດູເມຍ."
"ຊາວເອໂດມ" ເປັນເຊື້ອສາຍຂອງເອຊາວ.

- ບ່ອນຢູ່ຂອງເອໂດມໄດ້ປ່ຽນໄປບ່ອນໃໝ່. ສ່ວນໃຫຍ່ແມ່ນຕັ້ງຢູ່ທາງພາກໃຕ້ຂອງອິດສະຣາເອນ
  ແລະຂະຫຍາຍເຂົ້າໄປທາງໃຕ້ຂອງຢູດາ.
- ໃນສະໄໝພັນທະສັນຍາໃໝ່, ເອໂດມມີເນື້ອທີ່ກວມໄປທາງໃຕ້ຂອງແຂວງຢູດາ. ຄັ້ງໜຶ່ງພວກກຣີກໄດ້ເອີ້ນເອໂດມວ່າ "ອີດູເມຍ."
- ຊື່ເອໂດມໝາຍເຖິງ "ສີແດງ," ຊຶ່ງອ້າງເຖິງຄວາມຈິງທີ່ວ່າເອຊາວຖືກຫົ່ມດ້ວຍຂົນສີແດງຕອນທີ່ລາວເກີດໃໝ່.
  ຫລືອາດຈະເວົ້າເຖິງຖົ່ວແດງຕົ້ມ ທີ່ເອຊາວໄດ້ປ່ຽນເອົາສິດທິ່ຍ້ອງກິກຂອງລາວ.
- ໃນພັນທະສັນຍາເດີມ, ປະເທດເອໂດມໄດ້ຖືກເວົ້າເຖິງວ່າເປັນສັດຕູຂອງອິດສະຣາເອນ.
- ພຣະທຳໂອບາດີຢາໝົດທັ້ງເຫລັ້ມເປັນເລື່ອງກ່ຽວກັບການທຳລາຍເອໂດມ. ແລະຜູ້ປະກາດພຣະທຳໃນພັນທະສັນຍາເດີມເຫລັ້ມອື່ນໆ
  ຍັງໄດ້ທຳນວາຍໃນທາງລົບຕໍ່ຕ້ານເອໂດມ.


generated on Thu Jul 10 08:45:04 2025

## ເອໂນດ

### ຂໍ້ເທັດຈິງ

ເອໂນດແມ່ນຊື່ຂອງຊາຍສອງຄົນໃນພັນທະສັນຍາເດີມ.

- ຊາຍຄົນໜຶ່ງຊື່ເອໂນດໄດ້ສືບເຊື້ອສາຍມາຈາກເຊດ ລາວເປັນປູ່ຫວດຂອງໂນອາ.
- ເອໂນດເປັນຄົນທີ່ມີຄວາມໃກ້ຊິດກັບພຣະເຈົ້າ ແລະເມື່ອລາວອາຍຸໄດ້ 365 ປີ,
  ພຣະເຈົ້າໄດ້ຮັບລາວຂຶ້ນສະຫວັນໂດຍທີ່ບໍ່ຕ້ອງຜ່ານຄວາມຕາຍ.
- ຜູ້ຊາຍອີກຄົນໜຶ່ງທີ່ຊື່ເອໂນດຊຶ່ງເປັນລູກຊາຍຂອງກາອິນ.

## ເອໂຟດ

### ນິຍາມ

ເອໂຟດແມ່ນເສື້ອຄຸມທີ່ຄືກັບຜ້າກັນເປື້ອນນຸ່ງຫົ່ມໂດຍບັນດາປະໂຣຫິດອິດສະຣາເອນ. ຊຶ່ງມີສອງດ້ານ, ທາງໜ້າແລະທາງຫລັງ,
ທີ່ຕໍ່ເຂົ້າກັນບ່ອນບ່າໄຫລ່ແລະຜູກຮອບແອວດ້ວຍເຂັມຂັດຜ້າ.

- ເອໂຟດອີກຊະນິດໜຶ່ງທີ່ເຮັດຈາກຜ້າລີເນນຫ້າມະດາແລະນຸ່ງຫົ່ມໂດຍປະໂຣຫິດທົ່ວໄປ.
- ເອໂຟດທີ່ມະຫາປະໂຣຫິດນຸ່ງຫົ່ມໄດ້ຖືກຖັກເປັນພິເສດດ້ວຍເສັ້ນດ້າຍສີຄໍາ, ສີຟ້າ, ສີມ່ວງ, ແລະສີແດງ.
- ສ່ວນບ່ອນທີ່ປົກເອິກຂອງປະໂຣຫິດທີ່ຢູ່ທາງໜ້າເອໂຟດ. ທາງຫລັງທີ່ປົກເອິກຈະເປັນບ່ອນໃສ່ອຸຣິມແລະທຸມມິມ,
  ຊຶ່ງເປັນຫີນທີ່ໃຊ້ໃນການຖາມພຣະເຈົ້າວ່າ ພຣະອົງມີພຣະປະສົງໃນເລື່ອງໃດເລື່ອງໜຶ່ງໂດຍສະເພາະ.
- ຜູ້ປົກຄອງກີເດໂອນໄດ້ເຮັດເອໂຟດດ້ວຍຄໍາດ້ວຍຄວາມໂງ່ຈ້າແລະມັນໄດ້ກາຍເປັນສິ່ງທີ່ຄົນອິດສະຣາເອນພາກັນນະມັດສະການເໝືອນກັບຮູບເຄົາຣົບ.

## ເຮັດຊົ່ວ, ການເຮັດຊົ່ວ

### ນິຍາມ

ຄໍາວ່າ "ເຮັດຊົ່ວ" ແລະ "ການເຮັດຊົ່ວ" ກ່າວເຖິງສະຖານະຂອງກິດຈະການທີ່ຜູ້ຄົນເລີ່ມເຊື່ອມໂຊມລົງ, ຜິດສິນລະທໍາ, ຫລື ບໍ່ສັດຊື່.

- ຄໍາວ່າ "ເຮັດຊົ່ວ" ຕາມຕົວອັກສອນໝາຍເຖິງການ " ງໍ" ຫຼື "ຫັກ" ທາງສິນລະທໍາ.
- ຄົນທີ່ເຮັດຊົ່ວຫັນອອກຈາກຄວາມຈິງແລະກໍາລັງເຮັດສິ່ງທີ່ບໍ່ສັດຊື່ ຫຼືຜິດສິນລະທໍາ.
- ການເຮັດຊົ່ວຂອງຄົນໝາຍເຖິງການມີອິດທິພົນຕໍ່ບຸກຄົນນັ້ນໃຫ້ເຮັດສິ່ງທີ່ບໍ່ສັດຊື່ແລະຜິດສິນລະທໍາ.

### ຄໍາແນະນໍາໃນການແປ

- ຄໍາວ່າ "ເຮັດຊົ່ວ" ອາດແປວ່າ "ມີອິດທິພົນຕໍ່ການເຮັດຊົ່ວ" ຫຼື "ເຮັດໃຫ້ເກີດການຜິດສິນລະທໍາ."
- ຄົນເຮັດຊົ່ວສາມາດອະທິບາຍໄດ້ວ່າເປັນບຸກຄົນ "ທີ່ຜິດສິນລະທໍາ" ຫຼື "ຜູ້ເຮັດການຊົ່ວຮ້າຍ."
- ຄໍານາມອາດແປວ່າ "ບໍ່ດີ" ຫຼື "ຜິດສິນລະທໍາ" ຫຼື "ຊົ່ວຮ້າຍ."
- ຄໍາວ່າເຮັດຊົ່ວ ແປວ່າ "ການເຮັດຊົ່ວ" ຫຼື "ຊົ່ວ" ຫຼື "ຜິດສິນລະທໍາ."

## ເຮັດໃຫ້ຊອບທໍາ, ການນັບເປັນຜູ້ຊອບທໍາ

### ນິຍາມ

ຄໍາວ່າ “ ເຮັດໃຫ້ຊອບທໍາ“ ແລະ
“ການນັບເປັນຜູ້ຊອບທໍາ“ໝາຍເຖິງການທີ່ເຮັດໃຫ້ຜູ້ທີ່ມີຄວາມຜິດເປັນຄົນຊອບທໍາ.ມີແຕ່ພຣະເຈົ້າເທົ່ານັ້ນທີ່ສາມາດເຮັດໃຫ້ເປັນຄົນຊອບທໍາຢ່າງແທ້ຈິງໄດ້.

- ເມື່ອພຣະເຈົ້າເຮັດໃຫ້ມະນຸດມີຄວາມຊອບທໍາ, ພຣະອົງຈະໃຫ້ອະໄພບາບຂອງພວກເຂົາແລະເຮັດໃຫ້ພວກເຂົາບໍ່ມີບາບ.
  ພຣະອົງພຽງແຕ່ໃຫ້ຄົນບາບກັບໃຈແລະເຊື່ອວາງໃຈໃນພຣະເຢຊູຄຣິດເຈົ້າເພື່ອຊ່ວຍພວກເຂົາໃຫ້ພົ້ນຈາກບາບຂອງພວກເຂົາ.
- “ການນັບເປັນຄົນຊອບທໍາ“
  ໝາຍເຖິງສິ່ງທີ່ພຣະເຈົ້າໄດ້ເຮັດໃນເວລາທີ່ພຣະອົງໃຫ້ອະໄພບາບຂອງມະນຸດແລະປະກາດວ່າບຸກຄົນນັ້ນເປັນຄົນຊອບທໍາໃນສາຍຕາຂອງພຣະອົງ.


generated on Thu Jul 10 08:45:04 2025

### ຄຳແນະນຳ ໃນການແປ

- ອີກວິທີໜຶ່ງທີ່ຈະແປຄຳວ່າ “ເຮັດໃຫ້ຊອບທຳ“ ສາມາດປະກອບມີຄຳວ່າ “ປະກາດ“

## ເຮັດໃຫ້ລະອາຍ, ການເຮັດໃຫ້ລະອາຍ

### ນິຍາມ

ຄຳວ່າ "ເຮັດໃຫ້ລະອາຍ" ໝາຍເຖິງການເຮັດໃຫ້ບາງຄົນຮູ້ສຶກອັບອາຍຫຼື ເຊື່ອມເສັຍຊຶ່ງມັກຈະເຮັດໃນທີ່ສາທາລະນະ.
ການກະທຳທີ່ເຮັດໃຫ້ຄົນອື່ນອັບອາຍເອີ້ນວ່າ "ການເຮັດໃຫ້ລະອາຍ."

- ເມື່ອພຣະເຈົ້າເຮັດໃຫ້ຄົນໜຶ່ງຖ່ອມລົງ
  ໝາຍຄວາມວ່າພຣະອົງຊົງເຮັດໃຫ້ຄົນຈອງຫອງຕ້ອງພົບກັບຄວາມລົ້ມເຫລວເພື່ອຊ່ວຍເຂົາໃຫ້ເອົາຊະນະຄວາມຈອງຫອງຂອງຕົນ
  ສິ່ງນີ້ແຕກຕ່າງຈາກການເຮັດໃຫ້ບາງຄົນຮູ້ສຶກລະອາຍ ຊຶ່ງຈະເປັນການເຮັດເພື່ອທຳຮ້າຍຈິດໃຈຄົນນັ້ນ.
- ການ "ເຮັດໃຫ້ລະອາຍ" ສາມາດແປໄດ້ວ່າ "ເຮັດໃຫ້ຂາຍໜ້າ" ຫຼື "ເຮັດໃຫ້ຮູ້ສຶກຂາຍໜ້າ" ຫຼື "ເຮັດໃຫ້ອາຍ."
- ຂຶ້ນຢູ່ກັບສະພາບການວິທີທີ່ຈະແປ, "ການເຮັດໃຫ້ລະອາຍ" ສາມາດລວມເຖິງ, "ການເຮັດໃຫ້ຂາຍໜ້າ" ຫລື "ການເຮັດໃຫ້ຕ່ຳຕ້ອຍ" ຫຼື "ການເຮັດໃຫ້ເສື່ອມເສຍ."

## ເຮັດໃຫ້ສຳເລັດ

### ນິຍາມ

ຄຳວ່າ "ເຮັດໃຫ້ສຳເລັດ" ໝາຍເຖິງເຮັດໃຫ້ບາງສິ່ງສົມບູນ ຫລືເຮັດໃຫ້ບາງສິ່ງສຳເລັດຕາມທີ່ຄາດຫວັງໄວ້.

- ເມື່ອການປະກາດຜຣະທັມໄດ້ຮັບການເຮັດໃຫ້ສຳເລັດ, ນັ້ນໝາຍເຖິງວ່າ ພຣະເຈົ້າໄດ້ເຮັດໃຫ້ສິ່ງນັ້ນເກີດຂຶ້ນຕາມທີ່ໄດ້ທຳນວາຍໄວ້ໃນຄຳທຳນວາຍ.
- ຖ້າຄົນຜູ້ໃດ ເຮັດໃຫ້ຄຳສັນຍາຫລືຄຳປະຕິຍານສຳເລັດ, ນັ້ນໝາຍຄວາມວ່າເຂົາເຮັດໃນສິ່ງທີ່ເຂົາໄດ້ໃຫ້ສັນຍາໄວ້.
- ເພື່ອຄວາມຮັບຜິດຊອບສຳເລັດ, ໝາຍເຖິງການທຳໆງານທີ່ໄດ້ຮັບມອບໝາຍ ຫລືຮ້ອງຂໍ.

### ຄຳແນະນຳການແປ

- ຄຳວ່າ, "ເຮັດໃຫ້ສຳເລັດ" ສາມາດແປໄດ້ອີກວ່າ "ແລ້ວໆ" ຫລື "ສົມບູນ" ຫລື "ທຳໃຫ້ເກີດຂຶ້ນ" ຫລື "ເຊື່ອຟັງ" ຫລື "ປະຕິບັດການ." ທັ້ງນີ້ຂຶ້ນຢູ່ກັບບໍຣິບົດ
- ປະໂຫຍກທີ່ວ່າ "ໄດ້ຮັບການທຳໃຫ້ສຳເລັດແລ້ວ" ສາມາດແປໄດ້ອີກວ່າ, "ເປັນຈິງ" ຫລື "ໄດ້ເກີດຂຶ້ນແລ້ວ" ຫລື "ເກີດຂຶ້ນແລ້ວ."
- ແນວທາງການແປ "ເຮັດໃຫ້ສຳເລັດ" ເໝືອນໃນ "ການຮັບໃຊ້ຂອງທ່ານສຳເລັດ" ສາມາດລວມທັ້ງ" ສົມບູນ" ຫລື "ປະຕິບັດການ" ຫລື "ຝຶກ" ຫລື "ຮັບໃຊ້ຜູ້ອື່ນຢ່າງທີ່ພຣະເຈົ້າໄດ້ເອີ້ນມາໃຫ້ທ່ານເຮັດ."

## ເຮັດໃຫ້ເປັນທາດ, ເປັນເໝືອນທາດ

### ນິຍາມ

"ເຮັດໃຫ້ເປັນທາດ" ການເຮັດໃຫ້ບາງຄົນເປັນທາດໝາຍເຖິງການບັງຄັບໃຫ້ຄົນນັ້ນຮັບໃຊ້ເຈົ້ານາຍຫລືປະເທດທີ່ປົກຄອງ. ການ
"ເຮັດໃຫ້ເປັນທາດ" ຫລື "ເປັນເໝືອນທາດ" ໝາຍເຖິງຢູ່ພາຍໃຕ້ການຄວບຄຸມຂອງບາງສິ່ງຫລືບາງຄົນ.

- ຄົນທີ່ຖືກເຮັດໃຫ້ເປັນທາດຫລືເປັນເໝືອນທາດ ຕ້ອງຮັບໃຊ້ຜູ້ອື່ນໂດຍບໍ່ໄດ້ຮັບຄ່າຈ້າງ; ລາວບໍ່ສາມາດເຮັດໄດ້ໃນສິ່ງທີ່ລາວຢາກເຮັດ.
- ການ "ເຮັດຄົນເປັນທາດ" ຍັງໝາຍເຖິງການຈຳກັດອິດສະລະພາບຂອງຄົນໆນັ້ນດ້ວຍ.
- ມີອີກຄຳໜຶ່ງສຳລັບ "ເປັນເໝືອນທາດ" ແມ່ນ "ຖານະຂອງຄວາມເປັນທາດ."
- ເວົ້າໃນທາງປຽບທຽບວ່າ, ມະນຸດ "ຖືກເຮັດໃຫ້ເປັນທາດ"
  ຂອງບາບຈົນກວ່າພຣະເຢຊູຈະຊ່ວຍປົດປ່ອຍໃຫ້ພົ້ນຈາກການຖືກຄວບຄຸມແລະອຳນາດຂອງມັນ.
- ເມື່ອຄົນໆໜຶ່ງໄດ້ຮັບຊີວິດໃໝ່ໃນພຣະຄຣິດ, ລາວກໍໝົດການເປັນທາດຂອງຄວາມບາບແລະຈະກາຍເປັນຄົນຊອບທຳ.

### ຄຳແນະນຳໃນການແປ

- ຄຳວ່າ "ເຮັດໃຫ້ເປັນທາດ" ອາດຈະແປໄດ້ວ່າ "ເຮັດໃຫ້ບໍ່ມີອິດ ສະລະ" ຫລື "ບັງຄັບໃຫ້ຮັບໃຊ້ຄົນອື່ນ" ຫລື
  "ຕົກຢູ່ພາຍໃຕ້ການຄວບຄຸມຂອງຄົນອື່ນ."


generated on Thu Jul 10 08:45:04 2025

- ຖ້ອຍຄຳທີ່ວ່າ "ເຮັດໃຫ້ເປັນຫາດຂອງ" ຫລື "ເປັນເໝືອນຫາດຂອງ" ອາດຈະແປວ່າ "ຖືກບັງຄັບໃຫ້ເປັນຫາດຂອງ" ຫລື "ຖືກບັງຄັບໃຫ້ຮັບໃຊ້" ຫລື "ຢູ່ພາຍໃຕ້ການຄວບຄຸມຂອງ."

## ເຮັດໃຫ້ເປັນສິ່ງສັກສິດ

### ນິຍາມ

ເຮັດໃຫ້ເປັນສິ່ງສັກສິດ ໝາຍເຖິງຖວາຍບາງສິ່ງຫຼືບຸກຄົນໃດເພື່ອຈະຮັບໃຊ້ພຣະເຈົ້າ. ຄົນ ຫຼື
ສິ່ງຂອງທີ່ມອບຖະຫວາຍແດ່ພຣະເຈົ້າຖືວ່າບໍຣິສຸດ ແລະແຍກໄວ້ສຳລັບພຣະເຈົ້າໂດຍສະເພາະ.

- ຄວາມໝາຍຂອງຄຳນີ້ຄ້າຍກັບ "ການຊຳລະ" ຫຼື "ການເຮັດໃຫ້ບໍຣິສຸດ,"
  ແຕ່ຄ້ວຍການລວມຄວາມໝາຍແຫ່ງການແຍກໄວ້ຢ່າງເປັນທາງການສຳລັບການຮັບໃຊ້ພຣະເຈົ້າ.
- ສິ່ງທີ່ອຸທິດຖວາຍແດ່ພຣະເຈົ້າ, ລວມທັ້ງສັດທີ່ຈະຖືກຖວາຍບູຊາ, ແທ່ນຖວາຍເຄື່ອງເຜົາບູຊາແລະຫໍເຕັ້ນ.
- ບຸກຄົນທີ່ມອບຖວາຍແກ່ພຣະເຈົ້າ ຈະລວມທັ້ງ ພວກປະໂລຫິດ, ປະຊາຊົນອິດສະຣາເອນ, ແລະລູກຊາຍຫົວປີ.
- ບາງຄັ້ງຄຳວ່າ " ການເຮັດໃຫ້ສັກສິດ" ມີຄວາມໝາຍທີ່ຄ້າຍກັບ "ເຮັດໃຫ້ບໍຣິສຸດ," ໂດຍສະເພາະເມື່ອກ່ຽວຂ້ອງກັບການຕຽມຄົນ ຫຼື
  ສິ່ງຕ່າງໆສຳລັບການຮັບໃຊ້ພຣະເຈົ້າເພື່ອພວກເຂົາຈະຖືກສຳລະແລະເປັນທີ່ຍອມຮັບຈາກພຣະອົງ.

### ຄຳແນະນຳໃນການແປ

- ວິທີຈະແປຄຳວ່າ "ການເຮັດໃຫ້ສັກສິດ" ຄວນຈະລວມຄວາມ

ໝາຍ, "ແຍກພິເສດສຳລັບຮັບໃຊ້ພຣະເຈົ້າ" ຫຼື "ຊຳລະໃຫ້ບໍຣິສຸດເພື່ອຮັບໃຊ້ພຣະເຈົ້າ."

- ຄວນຈະພິຈາລະນາຄຳວ່າ "ບໍຣິສຸດ" ແລະ "ສຳລະໃຫ້ສະອາດ"

ໃນການແປດ້ວຍ.

## ເຮັດໃຫ້ເສື່ອມຄວາມສັກສິດ

### ນິຍາມ

ຄຳວ່າ "ເຮັດໃຫ້ເສື່ອມຄວາມສັກສິດ"ຫມາຍເຖິງການທຳລາຍ ຫລື ເຮັດໃຫ້ເສື່ອມຄວາມສັກສິດ ແກ່ສະຖານທີ ຫລື ວັດຖຸສັກສິດ
ໃນລັກສະນະທີ່ບໍ່ສາມາດຍອມຮັບໄດ້ ໃນການໃຊ້ສິ່ງນັ້ນ ໃນການນະມັດສະການອີກຕໍ່ໄປ.

- ຫລາຍຄັ້ງ ການເຮັດໃຫ້ບາງສິ່ງ ເສື່ອມ ກ່ຽວຂ້ອງ ກັບການບໍ່ເຄົາລົບເປັນສ່ວນຫລາຍ.
- ຕົວຢ່າງເຊັ່ນ ກະສັດທີ່ເປັນຄົນນອກສາດສະຫນາ ໄດ້ເຮັດໃຫ້

ຈານພິເສດເສື່ອມ ຄວາມສັກສິດ ໂດຍເອົາຈານພິເສດ ຈາກພຣະວິຫານຂອງພຣະເຈົ້າ ໄປໃຊ້ສຳຫລັບງານລ້ຽງ ທີ່ພະຣາຊວັງ ຂອງພວກເຂົາ.

- ກະດູກຈາກຄົນຕາຍ ຖືກນຳມາໃຊ້ ໂດຍພວກສັດຕູ ເພື່ອໃຫ້ແທ່ນບູຊາ ໃນພຣະວິຫານຂອງພຣະເຈົ້າ ເສື່ອມຄວາມສັກສິດ.
- ຄຳນີ້ອາດແປໄດ້ວ່າ "ເຮັດໃຫ້ບໍ່ສັກສິດ" ຫລື "ດູຫມິ່ນ ໂດຍເຮັດ

ໃຫ້ເສັຍຄວາມບໍຣິສຸດ" ຫລື "ຫຍາບຄາຍ" ຢ່າງບໍ່ມີເຄົາຣົບນັບຖື"ຫລື"ເຮັດໃຫ້ບໍ່ບໍຣິສຸດ"

## ເຮັບເຣີ

### ນິຍາມ

ຊາວ "ເຮັບເຣີ" ຄືຄົນທີ່ສືບເຊື້ອສາຍມາຈາກອັບຣາຮາມຜ່ານທາງອີຊາກແລະຢາໂຄບ.ອັບຣາຮາມເປັນຄົນທຳອິດໃນພຣະຄຳພີທີ່ຖືກເອີ້ນວ່າ
"ເຮັບເຣີ."

- ຄຳວ່າ "ເຮັບເຣີ" ຍັງອ້າງເຖິງພາສາທີ່ຄົນເຮັບເຣີເວົ້າ. ພຣະຄຳພີເດີມນັ້ນ ທຳອິດເລີມຕົ້ນຂຽນໃນພາສາເຮັບເຣີ.
- ໃນທີ່ຕ່າງໆກັນໃນພຣະຄຳພີ, ຊາວເຮັບເຣີຖືກເອີ້ນວ່າ "ຄົນຢິວ" ຫລື "ຄົນອິດສະຣາເອນ."
  ຈະເປັນການດີທີ່ສຸດທີ່ຈະຖືຮັກສາຄຳທັ້ງສາມໄວ້ໃນບໍລິບົດຕົ້ນສະບັບ, ຕາບໃດທີ່ຊັດເຈນວ່າ ຄຳເຫລົ່ານີ້ອ້າງເຖິງຄົນກຸ່ມດຽວກັນ.


generated on Thu Jul 10 08:45:04 2025

## ເຮັບໂຣນ

### ຂໍ້ເທັດຈິງ

ເຮັບໂຣນເປັນເມືອງທີ່ຕັ້ງຢູ່ເທິງໂນນພູຫີນສູງ, ຫ່າງຈາກກຸງເຢຣູຊາເລັມໄປທາງໃຕ້ປະມານ 32ກິໂລແມັດ.

- ເມືອງນີ້ຖືກສ້າງປະມານ 2.000 ປີ ກ່ອນ ຄ.ສ. ໃນສະໄໝຂອງອັບຣາຮາມ.
  ເປັນເມືອງທີ່ຖືກກ່າວເຖິງຫລາຍເທື່ອໃນເລື່ອງລາວທາງປະຫວັດສາດທີ່ມີບັນທຶກໃນພັນທະສັນຍາເດີມ.
- ເຮັບໂຣນມີບົດບາດສຳຄັນຫລາຍໃນຊີວິດຂອງກະສັດດາວິດ. ລູກຫລາຍຄົນຂອງທ່ານ, ລວມເຖິງອັບຊາໂລມ, ກໍເກີດຢ່ອນນັ້ນ.
- ເມືອງນີ້ຖືກທຳລາຍປະມານປີ ຄ.ສ ທີ 70 ໂດຍຊາວໂຣມັນ.

## ເຮືອນ

### ນິຍາມ

ຄຳວ່າ "ເຮືອນ" ມັກຈະຖືກໃຊ້ໃນເຊີງປຽບທຽບໃນພຣະຄຳພີ.

- ບາງເທື່ອໝາຍຄວາມວ່າ "ຄົວເຮືອນ," ຊຶ່ງໝາຍເຖິງຄົນທີ່ອາໄສຢູ່ນຳກັນໃນບ້ານຫລັງໜຶ່ງ.
- ຫລາຍເທື່ອທີ "ບ້ານ" ອ້າງເຖິງບັນພະບຸລຸດ ເຊື້ອສາຍຫລືຍາດພີ່ນ້ອງຄົນອື່ນໆ ຂອງຄົນໜຶ່ງ. ຕົວຢ່າງເຊັ່ນ , "ຕະກູນຂອງດາວິດ"
  ອ້າງເຖິງຜູ້ສືບເຊື້ອສາຍທັງໝົດຂອງກະສັດດາວິດ.
- ຄຳວ່າ "ວິຫານຂອງພຣະເຈົ້າ" ແລະ "ວິຫານຂອງພຣະເຈົ້າຢາເວ" ໝາຍເຖິງຫໍເຕັ້ນຫລືພຣະວິຫານ.
  ຄຳກ່າວນີ້ສາມາດອ້າງເຖິງໂດຍຫົວໄປສະຖານທີ່ທີ່ພຣະເຈົ້າສະຖິດຫລືປະທັບຢູ່.
- ໃນພຣະທຳເຮັບເຣີ ຍົກທີ 3, "ຄອບຄົວຂອງພຣະເຈົ້າ" ຖືກໃຊ້ເປັນຄຳອຸປະມາເພື່ອອ້າງເຖິງຄົນຂອງພຣະເຈົ້າຫລືໂດຍຫົວໄປແລ້ວ,
  ຄືທຸກສິ່ງທີ່ເປັນຂອງພຣະເຈົ້າ.
- ວະລີ "ເຊື້ອສາຍຂອງອິດສະຣາເອນ"
  ສາມາດອ້າງເຖິງປະເທດອິດສະຣາເອນທັງປະເທດຫລືສະເພາະເຈາະຈົງລົງໄປອີກຄືເຜົ່າທີ່ຢູ່ໃນອານາຈັກຂອງອິດສະຣາເອນທາງພາກເໜືອ.

#### ຄຳແນະນຳໃນການແປ

- ຂຶ້ນຢູ່ກັບສະພາບການ, "ເຮືອນ" ສາມາດແປວ່າ, "ຄົວເຮືອນ" ຫລື "ຜູ້ຄົນ" ຫລື "ຄອບຄົວ" ຫລື "ເຊື້ອສາຍ" ຫລື "ພຣະວິຫານ"
  ຫລື "ສະຖານທີ່ຢູ່ອາໄສ."
- ວະລີ "ຕະກູນຂອງດາວິດ" ອາດຈະແປວ່າ, "ເຜົ່າພັນຂອງດາວິດ" ຫລື "ຄອບຄົວຂອງດາວິດ" ຫລື "ເຊື້ອສາຍຂອງດາວິດ."
  ສຳນວນທີ່ກ່ຽວຂ້ອງກັນສາມາດຈະແປໄດ້ໃນທາງທີ່ໃກ້ຄຽງກັນ.
- ວິທີອື່ນທີ່ຈະແປ "ເຊື້ອສາຍຂອງອິດສະຣາເອນ" ອາດລວມເຖິງ, "ປະຊາກອນຂອງອິດສະຣາເອນ" ຫລື
  "ລູກຫລານຂອງອິດສະຣາເອນ" ຫລື "ຄົນອິດສະຣາເອນ."
- "ນິເວດຂອງພຣະເຈົ້າຢາເວ" ສາມາດແປໄດ້ວ່າ "ວິຫານຂອງພຣະເຈົ້າຢາເວ" ຫລື
  "ສະຖານທີ່ທີ່ມີການນະມັດສະການພຣະເຈົ້າຢາເວ" ຫລື "ສະຖານທີ່ທີ່ພຣະເຈົ້າຢາເວສະເດັດມາພົບກັບຄົນຂອງພຣະອົງ" ຫລື
  "ສະຖານທີ່ທີ່ພຣະເຈົ້າຢາເວປະທັບຢູ່."
- "ພຣະນິເວດຂອງພຣະເຈົ້າ" ສາມາດແປໄດ້ໃນແບບຄ້າຍຄືກັນ.

## ເຮີ,ພຣະຢາເວ

### ນິຍາມ

ຫລາຍຄັ້ງໃນພຣະສັນຍາເດີມ ເມື່ອພຣະເຈົ້າຊົງກ່າວ ກ່ຽວກັບພຣະອົງ,ພຣະອົງຊົງໃຊ້ພຣະນາມຂອງພຣະອົງແທນຄຳແທນນາມ.

- ຍົກຕົວຢ່າງເຊ່ນ ແທນທີ່ຈະເວົ້າວ່າ "ຈົ່ງໃຫ້ກຽດແກ່ເຮີ " ພຣະອົງກ່າວວ່າ " ຈົ່ງໃຫ້ກຽດແກ່ພຣະຢາເວ "
- ຫໍາໃຫ້ຊັດເຈນວ່າພຣະເຈົ້າຊົງເປັນຜູ້ທີ່ກໍາລັງກ່າວກ່ຽວກັບພຣະອົງເອງ ສະບັບ ULB ມັກຈະແປຄໍາ ນີ້ໂດຍການເຕີມຄໍາແທນນາມ
  ເຊັ່ນໃນ " ຈົ່ງໃຫ້ກຽດແກ່ເຮີ ພຣະຢາເວ " ຫລື "ເຮີ ພຣະຢາເວກ່າວ "
- ໂດຍການເຕີມຄໍາແທນນາມ "ເຮີ " ULB ໄດ້ຊີ້ໃຫ້ຜູ້ອ່ານເຫັນວ່າ ພຣະເຈົ້າເປັນຜູ້ກ່າວ.

#### ຄຳແນະນຳໃນການແປ

- ຜູ້ແປບາງຄົນອາດຕັດສິນໃຈວ່າ ມັນຈະເປັນຫໍາມະຊາດ ແລະ ຊັດເຈນຫລາຍກ່ວາໃນພາສາຂອງຕົນ
  ຫາກແປກົງຕາມຂໍ້ຄວາມທີ່ປະກົດ ແລະ ໃຊ້ຄໍາວ່າ "ພຣະຢາເວ " ໂດຍບໍ່ເພີ່ມຄໍາແທນນາມລົງໄປ.


generated on Thu Jul 10 08:45:04 2025

- ບາງຄົນອາດຕັດສິນໃຈທີ່ຈະໃຊ້ຄຳແທນນາມກັບພຣະຢາເວ ພຽງບໍ່ຈັກຄັ້ງໃນຊ່ວງເລີ່ມຕົ້ນຂອງຂໍ້ຄວາມ ແຕ່ຕໍ່ມາກໍບໍ່ເອົາຄຳແທນນາມ ໃນສ່ວນທີ່ເຫລືອຂອງສ່ວນນັ້ນ ຕົວຢ່າງຂອງ ULB ໃນບ່ອນນີ້ຄື ພະບັນຍັດສອງ 5:9-16
- ຈະເປັນການດີທີ່ສຸດຖ້າສາມາດຮັກສາພຣະນາມພຣະຢາເວໄວ້ໃນຈຸດທີ່ປາກົດກົງຕາມຕົວອັກສອນໃນຂໍ້ຄວາມ, ແຕ່ສະບັບແປບາງສະບັບອາດຕັດສິນໃຈທີ່ຈະໃຊ້ພຽງຄຳແທນນາມໃນບາງຈຸດ ເພື່ອໃຫ້ຂໍ້ຄວາມເປັນທຳມະຊາດ ແລະຊັດເຈນຫລາຍຂຶ້ນ.
- ນີ້ເປັນຂໍ້ສະຫລຸບຂອງວິທີທີ່ສາມາດຈະແປຄຳວ່າ "ພຣະຢາເວ"ເມື່ອພຣະເຈົ້າກຳລັງກ່າວ.
- "ພຣະຢາເວ "

## ເຮເຊກີຢາ

### ຂໍ້ເທັດຈິງ

ເຮເຊກີຢາເປັນກະສັດອົງທີ 13 ແຫ່ງອານາຈັກຢູດາຍ ທ່ານເປັນກະສັດຜູ້ທີ່ໄດ້ໄວ້ວາງໃຈແລະເຊື່ອຟັງພຣະເຈົ້າ.

- ບໍ່ເໝືອນກັນກັບອາຮາບພໍ່ຂອງທ່ານທີ່ເປັນກະສັດຊົ່ວຮ້າຍ, ກະສັດເຮເຊກີຢາເປັນກະສັດທີ່ດີຜູ້ໄດ້ທຳລາຍສະຖານນະມັດການຮູບເຄົ່າລົບທັງໝົດໃນຢູດາຍ.
- ມີເທື່ອໜຶ່ງເມື່ອເຮເຊກີຢາໄດ້ປ່ວຍໜັກແລະເກືອບເສຍຊີວິດ, ພຣະອົງໄດ້ອະທິຖານຢ່າງຮ້ອນຮົນ. ພຣະເຈົ້າຊົງຮັກສາທ່ານຈາກພະຍາດຮ້າຍແຮງແລະໃຫ້ທ່ານມີຊີວິດຢູ່ອີກ 15 ປີ.
- ແລະເປັນສັນຍານຕໍ່ເຮເຊກີຢາວ່າສິ່ງນີ້ຈະເກີດຂຶ້ນ, ພຣະເຈົ້າຊົງໄດ້ກະທຳການອັດສະຈັນແລະຊົງເຮັດໃຫ້ເວລາໄດ້ຍ້ອນກັບ.
- ພຣະເຈົ້າຊົງຕອບຄຳອະທິຖານຂອງເຮເຊກີຢາເພື່ອຊ່ວຍປະຊາຊົນຂອງເພິ່ນຈາກກະສັດເຊັນນາເກຣິບແຫ່ງອັດຊີເຣຍ, ຜູ້ທີ່ກຳລັງໂຈມຕີພວກເຂົາ.

## ເຮໂຣດ ມະຫາຣາດ

### ຂໍ້ເທັດຈິງ

ເຮໂຣດ ມະຫາຣາດ ໄດ້ປົກຄອງເໜືອຢູດາໃນເວລາທີ່ພຣະເຢຊູຊົງບັງເກີດ.
ທ່ານເປັນພວກຜູ້ປົກຄອງຊາວເອໂດມຄົນທຳອິດທີ່ມີຊື່ວ່າເຮໂຣດຜູ້ໄດ້ປົກຄອງເໜືອຫລາຍສ່ວນຂອງອານາຈັກໂຣມັນ.

- ບັນພະບຸລຸດຂອງທ່ານໄດ້ປ່ຽນມານັບຖືລັດທິຢູດາຍແລະທ່ານຖືກລ້ຽງດູມາເໝືອນຄົນຢິວ.
- ຊີຊາອໍກັດຕັດໄດ້ຕັ້ງຊື່ທ່ານວ່າ "ກະສັດເຮໂຣດ" ເຖິງແມ່ນວ່າທ່ານບໍ່ໄດ້ເປັນກະສັດທີ່ແທ້ຈິງກໍຕາມ. ທ່ານໄດ້ປົກຄອງເໜືອຊາວຢິວໃນຢູດາຍເປັນເວລາ 33 ປີ.
- ເຮໂຣດ ມະຫາຣາດໄດ້ເປັນທີ່ຮູ້ຈັກກັນໃນຖານະທີ່ໄດ້ສັ່ງໃຫ້ມີການກໍ່ສ້າງອາຄານທີ່ສວຍງາມ, ລວມທັ້ງການບູລະນະພຣະວິຫານຂອງພວກຢິວໃນນະຄອນເຢຣູຊາເລັມ.
- ເຮໂຣດອົງນີ້ໂຫດຮ້າຍຫລາຍແລະທ່ານໄດ້ສັ່ງໃຫ້ປະຫານປະຊາຊົນຫລາຍຄົນ ເມື່ອທ່ານໄດ້ຍິນວ່າ " ກະສັດຂອງຢິວ" ອີກອົງໜຶ່ງໄດ້ມາບັງເກີດໃນເບັດເລເຮັມ, ທ່ານໄດ້ສັ່ງໃຫ້ປະຫານເດັກນ້ອຍຊາຍທັງໝົດໃນເມືອງນັ້ນ.
- ລູກຊາຍ, ຂອງທ່ານ ເຮໂຣດ ອັນທິປັດແລະເຮໂຣດ ຟີລິບແລະຫລານຊາຍຂອງທ່ານ ເຮໂຣດ ອາກຣິບປາໄດ້ກາຍມາເປັນຜູ້ປົກຄອງໂຣມັນ. ເຫລນຊາຍຂອງທ່ານ ເຮໂຣດ ອາກຣິບປາທີ່ສອງ (ເອີ້ນກັນວ່າ "ກະສັດອາກຣິບປາ") ໄດ້ປົກຄອງຫົວທັ້ງອານາເຂດຢູດາຍ.

## ເຮໂຣດ ອັນທິປັດ

### ຂໍ້ເທັດຈິງ

ລະຫວ່າງເກືອບຊົ່ວຊີວິດຂອງພຣະເຢຊູ, ເຮໂຣດ ອັນທິປັດເປັນຜູ້ປົກຄອງ ສ່ວນໜຶ່ງຂອງອານາຈັກໂຣມັນຊຶ່ງລວມທັ້ງແຄວ້ນຄາລີເລ.

- ເໝືອນກັບພໍ່ຂອງທ່ານຄືເຮໂຣດມະຫາຣາດ, ບາງເທື່ອອັນທິປັດໄດ້ຖືກອ້າງເຖິງໃນນາມ "ກະສັດເຮໂຣດ" ເຖິງວ່າທ່ານຈະບໍ່ແມ່ນກະສັດທີ່ແທ້ຈິງກໍຕາມ.
- ເຮໂຣດ ອັນທິປັດປົກຄອງໜຶ່ງໃນສີ່ຂອງອານາຈັກໂຣມັນ ແລະທ່ານຍັງຖືກເອີ້ນວ່າ "ເຮໂຣດເຈົ້າເມືອງ."
- ອັນທິປັດຄື "ເຮໂຣດ" ທີ່ສັ່ງໃຫ້ປະຫານໂຢຮັນຜູ້ໃຫ້ບັບຕິສະມາໂດຍການຕັດຫົວ.
- ເປັນເຮໂຣດ ອັນທິປັດ ຜູ້ທີ່ໄດ້ຊັກຖາມພຣະເຢຊູກ່ອນທີ່ພຣະອົງຈະຖືກຄຶງທີ່ໄມ້ກາງແຂນ.
- "ເຮໂຣດ" ອີກຄົນໜຶ່ງໃນພັນທະສັນຍາໃໝ່ ຄື ບຸດຊາຍຂອງອັນທິປັດ (ອາກຣິບປາ) ແລະຫລານ (ອາກຣິບປາ ທີ 2) ຜູ້ໄດ້ປົກຄອງລະຫວ່າງເວລາຂອງບັນດາອັດຄະສາວົກ.


generated on Thu Jul 10 08:45:04 2025

## ເຮໂຣເດຍ

### ຂໍ້ເທັດຈິງ

ເຮໂຣດຽດເປັນມະເຫສີຂອງກະສັດເຮໂຣດ ອັນທີ່ປົກ ໃນແຄວ້ນຢູເດຍໃນສະໄໝຂອງໂຢຮັນ ຜູ້ໃຫ້ບັບຕິສະມາ.

- ແຕ່ເດີມເຮໂຣດຽດເປັນມະເຫສີຂອງຟີລິບ ອ້າຍຂອງເຮໂຣດ ອັນທີ່ປົກ, ແຕ່ຕໍ່ມາໄດ້ສົມຣົດຢ່າງບໍ່ຖືກຕ້ອງຕາມກົດໝາຍກັບເຮໂຣດ ອັນທີ່ປົກ.
- ໂຢຮັນຜູ້ໃຫ້ບັບຕິມາໄດ້ຕຳນິເຮໂຣດແລະເຮໂຣດຽດໃນເລື່ອງການສົມຣົດຢ່າງບໍ່ຖືກຕ້ອງຕາມກົດໝາຍ ດ້ວຍເຫດນີ້, ເຮໂຣດຈຶ່ງຂັງໂຢຮັນໄວ້ໃນຄຸກແລະໃນທີ່ສຸດກໍສັ່ງໃຫ້ຕັດຫົວຜ່ານ.

## ແກ

### ນິຍາມ

ຄຳວ່າ "ແກ" ອ້າງເຖິງເຄື່ອງມືໃນການບັນເລງດົນຕີຫລືເອີນຄົນມາຊຸມນຸມກັນເພື່ອປະກາດຫລືເຮັດການປະຊຸມ.

- ແກໂດຍຫົວໄປເຮັດຈາກໂລຫະ, ເປືອກຫອຍ, ຫລືເຂົາສັດ.
- ແກໄດ້ຖືກເປົ່າຫລາຍທີ່ສຸດເພື່ອເອີນຄົນມາລວມກັນເພື່ອສູ້ຮົບແລະເພື່ອການຊຸມນຸມສາທາລະນະຂອງອິດສະຣາເອນ
- ພຣະທຳພຣະນິມິດອະທິບາຍເຖິງສາກໃນຕອນຈົບທີ່ທູດສະຫວັນເປົ່າແກຂອງພວກເຂົາເພື່ອສົ່ງສັນຍານການເທພຣະພິໂລດຂອງພຣະເຈົ້າເທິງແຜ່ນດິນໂລ

## ແກບ

### ນິຍາມ

ແກບຄືເປືອກທີ່ຫຸ້ມຫໍ່ເມັດເຂົ້າ ແກບບໍ່ດີສຳຫລັບເປັນອາຫານ ດັ່ງນັ້ນ ຄົນຈຶ່ງແຍກແກບອອກຈາກເມັດເຂົ້າ ແລະໂຍນຖິ້ມໄປ

- ຫລາຍເທື່ອທີ່ແກບຖືກແຍກອອກຈາກເມັດເຂົ້າໂດຍການຝັດສ່ວນຫົວຂອງເມັດຂຶ້ນໄປເທິງອາກາດ ລົມຈະພັດເອົາແກບອອກໄປ ແລະເມັດຈະຕົກລົງທີ່ພື້ນດິນ ຂະບວນການນີ້ເອີນວ່າ "ຝັດຮ່ອນ"
- ໃນພຣະຄຳພີ ຄຳນີ້ໃຊ້ເປັນຄຳປຽບທຽບ ທີ່ຫມາຍເຖິງຄົນຊົ່ວຮ້າຍ ຫລືສິ່ງທີ່ຊົ່ວຮ້າຍແລະໄຮ້ຄ່າ

## ແກ້ແຄ້ນໃຫ້, ແກ້ແຄ້ນ, ການແກ້ແຄ້ນ

### ນິຍາມ

ຄຳວ່າ " ແກ້ແຄ້ນໃຫ້ " ຫລື " ຈັດການແກ້ແຄ້ນ " ຫລື " ດຳເນີນການໆແກ້ແຄ້ນ "
ເປັນການລົງໂທດບາງຄົນເພື່ອເປັນການຕອບແທນສຳລັບສິ່ງຊົ່ວຮ້າຍທີ່ເຂົາໄດ້ກະທຳ ການກະທຳໃນການແກ້ແຄ້ນໃຫ້ ຫລືເຮັດການແກ້ແຄ້ນຄື " ການແກ້ແຄ້ນ. "

- ເມື່ອເວົ້າເຖິງຜູ້ຄົນ ສ່ານຽງທີ່ວ່າ, " ຈັດການແກ້ແຄ້ນ " ຫລື " ກະທຳການແກ້ແຄ້ນ "
  ປົກກະຕິກ່ຽວຂອງກັບຄວາມຕ້ອງທີ່ຈະໃຫ້ຕອບຄືນແກ່ຄົນທີ່ໄດ້ທຳໃນສິ່ງຊົ່ວຮ້າຍ.
- ເມື່ອພຣະເຈົ້າ " ຊົ່ງຈັດການໆແກ້ແຄ້ນ " ຫລື " ຊົ່ງກະທຳການໆແກ້ແຄ້ນ " ພຣະອົງຊົ່ງກະທຳດ້ວຍຄວາມຊອບທັມ
  ເພາະວ່າພຣະອົງຊົ່ງກຳລັງລົງໂທດຄວາມບາບແລະການກະບົດ.

### ຂໍ້ແນະນຳໃນການແປ

- ຄຳວ່າ "ແກ້ແຄ້ນໃຫ້ " ບາງຄົນອາດຈະເວົ້າວ່າ " ເພື່ອແກ້ໄຂໃນສິ່ງທີ່ຜິດໃຫ້ຖືກຕ້ອງ "ຫລື " ເພື່ອໃຫ້ມີຄວາມຍຸຕິທັມ."
- ເມື່ອເວົ້າເຖິງມະນຸດ "ຈັດການແກ້ແຄ້ນ " ອາດໝາຍຄວາມວ່າ " ການແກ້ແຄ້ນເອົາຄືນ " ຫລື " ທຳຮ້າຍເພື່ອເປັນການລົງໂທດ " ຫລື " ໂຕ້ຕອບກັບ."
- " ການແກ້ແຄ້ນ "ອາດຈະແປໄດ້ອີກວ່າ, " ການລົງໂທດ " ຫລື " ການລົງໂທດບາບ " ຫລື " ການຕອບແທນສຳລັບການກະທຳຜິດ, " ຖ້າຫາກຄຳນັ້ນມີຄວາມໝາຍວ່າ " ການຕອບແທນ " ກໍຈະໃຊ້ສຳລັບມະນຸດເທົ່ານັ້ນ ທັ້ງນີ້ຂຶ້ນຢູ່ກັບກໍລະນີນັ້ນໆ.
- ເມື່ອພຣະເຈົ້າຊົ່ງສັ່ງວ່າ " ຈັດການໆ ແກ້ແຄ້ນຂອງເຮົາ " ຄຳນີ້ອາດຈະແປໄດ້ວ່າ " ລົງໂທດພວກເຂົາສຳລັບການທຳຜິດຕໍ່ຕ້ານເຮົາ " ຫລື " ທຳໃຫ້ສິ່ງຊົ່ວຮ້າຍເກີດຂຶ້ນເພາະພວກເຂົາໄດ້ກະທຳບາບຕໍ່ເຮົາ."
- ເມື່ອເວົ້າເຖິງການແກ້ແຄ້ນຂອງພຣະເຈົ້າ, ໃຫ້ແນ່ໃຈວ່າພຣະເຈົ້າຊົ່ງກະທຳການຢ່າງຖືກຕ້ອງໃນການລົງໂທດບາບ.


generated on Thu Jul 10 08:45:04 2025

## ແຂວງ, ແຄ້ວນ

### ນິຍາມ

ແຂວງຄືຫນ່ວຍຫລືສ່ວນຂອງປະເທດຫລືອານາຈັກ ຄໍາວ່າ " ແຄວ້ນ" ອະທິບາຍເຖິງບາງຢ່າງທີ່ມີຄວາມສໍາພັນກັບແຂວງ ເຊັ່ນ ຜູ້ວ່າຣາດການແຂວງ

- ຕົວຢ່າງເຊັ່ນ ອານາຈັກເປີເຊຍຫຼາຍຫົວໜ່ວຍຖືກແບ່ງໃຫ້ເປັນແຄວ້ນຕ່າງໆ ເຊັ່ນແຄວ້ນມີເດຍ ເປີເຊຍ ຊີເຣຍ ແລະອີຢິບ
- ໃນຊ່ວງເວລາຂອງພັນທະສັນຍາໃໝ່ ອານາຈັກໂຣມັນຖືກແບ່ງໃຫ້ເປັນແຂວງຕ່າງໆ ເຊັ່ນ ມາຊີໂດເນຍ ເອເຊຍ ຊີເຣຍ ຢູດາ ສະມາເຣຍ ກາລິເລ ແລະກາລາເຕຍ
- ໃນແຕ່ລະແຂວງຈະມີອໍານາດການປົກຄອງເປັນຂອງຕົວເອງຊຶ່ງຕ້ອງຣາຍງານຕໍ່ກະສັດຫລືຜູ້ປົກຄອງຂອງອານາຈັກ ຜູ້ປົກຄອງນີ້ບາງເທື່ອຈະຖືກຮຽກວ່າ "ເຈົ້າຫນ້າທີ່ແຂວງ" ຫລື "ຜູ້ວ່າຣາດການແຂວງ"
- ຄໍາວ່າ "ແຂວງ" ແລະ "ແຄວ້ນ" ອາດແປໄດ້ວ່າ "ພູມິພາກ" ແລະ "ຫົວແຄວ້ນ"

## ແຂວນ

### ນິຍາມ

ຄໍາວ່າ "ແຂວນ" ໝາຍເຖິງການຫ້ອຍບາງຢ່າງຫລືບາງຄົນໄວ້ເໜືອພື້ນດິນ.

- ຄວາມຕາຍໂດຍການແຂວນຄໍຈະເຮັດໂດຍການໃຊ້ບ້ວງເຊືອກຜູກໄວ້ອ້ອມຮອບຄໍຂອງບຸກຄົນແລະຫ້ອຍລົງມາຈາກສິ່ງທີ່ຢູ່ສູງກວ່າ, ເຊັ່ນ ກິ່ງໄມ້ ຢູດາຂ້າຕົວຕາຍໂດຍການແຂວນຄໍ.
- ຄວາມຕາຍຂອງພຣະເຢຊູໂດຍການແຂວນເທິງໄມ້ກາງແຂນເປັນການກະທໍາທີ່ແຕກຕ່າງໄປ: ທະຫານແຂວນພຣະອົງໂດຍການຕອກຕະປູທີ່ມື (ຫລືຂໍ້ມື) ຂອງພຣະອົງແລະຕີນຂອງພຣະອົງກັບກາງແຂນ.
- ການແຂວນບາງຄົນອາດອ້າງເຖິງການຂ້າບາງຄົນໂດຍການແຂວນພວກເຂົາດ້ວຍເຊືອກຮອບຄໍພວກເຂົາ.

## ແຄວ້ນເອເຊຍ

### ຂໍ້ເທັດຈິງ

ໃນສະໄໝພຣະຄັມພີ " ເອເຊຍ " ເປັນຂອງແຄ້ວນໜຶ່ງຂອງອານາຈັກໂຣມ ແຄ້ວນນີ້ຕັ້ງຢູ່ທາງຕະວັນຕົກຂອງປະເທດຕຸຣະກີໃນປະຈຸບັນນີ້.

- ໂປໂລໄດ້ເດີນທາງໄປຍັງແຄ້ວນເອເຊຍແລະໄດ້ປະກາດຂ່າວປະເສີດໃນຫລາຍໆເມືອງທີ່ນັ້ນ. ໃນຫ່ານກາງເມືອງເຫລົ່ານີ້ມີເມືອງເອເຟໂຊແລະເມືອງໂກຣິນໂທ.
- ເພື່ອບໍ່ໃຫ້ສັບສົນກັບທະວີບເອເຊຍໃນປະຈຸບັນ ອາດຈໍາເປັນທີ່ຈະຕ້ອງແປຄໍານີ້ວ່າ " ແຄ້ວນໜຶ່ງຂອງໂຣມສະໄໝບູຮານຊື່ເອເຊຍ " ຫລື " ແຄວ້ນເອເຊຍ. "
- ຄຣິສຕະຈັກທັງໝົດທີ່ເວົ້າເຖິງໃນພຣະທັມພຣະນິມິດທັງໝົດຢູ່ໃນແຄ້ວນເອເຊຍຂອງໂຣມ.

## ແຊມຊັນ

### ຂໍ້ເທັດຈິງ

ແຊມຊັນເປັນຜູ້ໜຶ່ງໃນພວກຜູ້ປົກຄອງຫລືຜູ້ຊ່ວຍເຫຼືອຄົນໜຶ່ງຂອງຊົນຊາດອິດສະຣາເອນເພິ່ນເປັນຄົນເຜົ່າດານ ພຣະເຈົ້າປະທານພະລັງເໜືອມະນຸດໃຫ້ແກ່ແຊມຊັນ ຊຶ່ງເຂົາໄດ້ໃຊ້ໃນການຕໍ່ສູ້ກັບສັດຕູຂອງຊົນຊາດອິດສະຣາເອນຄືຊາວຟີລິດສະຕິນ.

- ແຊມຊັນໄດ້ຖືກໃຫ້ຢູ່ພາຍໃຕ້ຄໍາປະຕິຍານທີ່ຈະບໍ່ຕັດຜົມຂອງລາວແລະບໍ່ດື່ມເຫຼົ້າອະງຸ່ນຫຼືເຄື່ອງດື່ມທີ່ເປັນເຄື່ອງໝັກເຄື່ອງດອງໃດໆເລີຍ ຕາບໃດທີ່ລາວຮັກສາຄໍາປະຕິຍານນີ້ ພຣະເຈົ້າກໍຈະປະທານພະລັງໃຫ້ລາວຢ່າງຕໍ່ເນື່ອງ
- ແຕ່ສຸດທ້າຍແຊມຊັນໄດ້ເຮັດຜິດຕໍ່ຄໍາປະຕິຍານແລະຍອມໃຫ້ຜົມຂອງລາວຖືກຕັດ ຊຶ່ງເຮັດໃຫ້ຊາວຟີລິດສະຕິນຈັບລາວໄດ້
- ໃນຂະນະທີ່ແຊມຊັນຖືກກັກຂັງ ພຣະເຈົ້າໄດ້ຊົງກະທໍາໃຫ້ແຊມຊັນມີກໍາລັງກັບຄືນມາອີກຄັ້ງ ແລະປະທານໂອກາດໃຫ້ລາວທໍາລາຍວິຫານຂອງພຣະທຽມດາໂກນພ້ອມກັບຊາວຟີລິດສະຕິນຫຼາຍຄົນ.


generated on Thu Jul 10 08:45:04 2025

## ແຍກອອກຈາກກັນ

### ນິຍາມ

ຄຳວ່າ "ແຍກອອກຈາກກັນ" ໝາຍຄວາມວ່າຖືກແຍກອອກຈາກບາງສິ່ງບາງຢ່າງເພື່ອບັນລຸຈຸດປະສົງໃດໜຶ່ງ.

- ຊາວອິດສະລາແອນຖືກແຍກອອກໄປຮັບໃຊ້ພະເຈົ້າ.
- ພຣະວິນຍານບໍລິສຸດໄດ້ສັ່ງໃຫ້ຊາວຄຣິດສຕຽນທີເມືອງອັນຕີອົກເຂຍໄດ້ແບ່ງແຍກໂປໂລແລະບານາບາເພື່ອເຮັດວຽກທີພຣະເຈົ້າປະສົງໃຫ້ພວກເຂົາເຮັດ.
- ຜູ້ທີເຊື່ອທີ "ແຍກອອກຈາກກັນ" ເພື່ອຮັບໃຊ້ພະເຈົ້າແມ່ນ "ອຸທິດຕົນເພື່ອ" ເຮັດໃຫ້ໃຈປະສົງຂອງພະເຈົ້າ ສຳ ເລັດ.
- ຄວາມໝາຍໜຶ່ງຂອງຄຳວ່າ "ບໍລິສຸດ" ແມ່ນການແຍກອອກເປັນຂອງພຣະເຈົ້າແລະຖືກແຍກອອກຈາກແນວທາງທີຜິດຂອງໂລກ.
- ຄຳວ່າ "ບໍລິສຸດ" ໝາຍເຖິງການແຍກຄົນໃຫ້ຮັບໃຊ້ພຣະເຈົ້າ.

%ຄຳແນະນຳໃນການແປ

- ວິທີການແປ "ເພື່ອແຍກອອກໄປ" ສາມາດປະກອບມີ, "ເພື່ອເລືອກເອົາພິເສດ" ຫຼື "ແຍກອອກຈາກບັນດາຫ່ານ" ຫຼື "ເອົາໄປເຮັດໜ້າທີພິເສດ."
- "ຖືກແຍກອອກໄປ" ສາມາດຖືກແປເປັນ "ແຍກອອກຈາກກັນ."

## ແດນມໍລະນາ

### ນິຍາມ

ຄຳວ່າ "ແດນມໍລະນາ" ແລະ "ແດນຄົນຕາຍ"
ໄດ້ໃຊ້ໃນພຣະຄຳພີເພື່ອອ້າງເຖິງຄວາມຕາຍແລະສະຖານທີທີດວງວິນຍານຂອງຜູ້ຄົນໄປຢູ່ທີນັ້ນເມືອພວກເຂົາຕາຍ.
ຄວາມໝາຍຂອງທັ້ງສອງຄຳຄ້າຍຄືກັນ.

- ພາສາເຮັບເຣີ ຄຳວ່າ "ແດນມໍລະນາ" ແມ່ນມັກໃຊ້ໃນພັນທະສັນຍາເດີມເພື່ອອ້າງເຖິງສະຖານທີແຫ່ງຄວາມຕາຍ.
- ໃນພັນທະສັນຍາໃໝ່, ຄຳໃນພາສາກຣີກທີວ່າ "ແດນຄົນຕາຍ" ໝາຍເຖິງສະຖານທີສຳລັບດວງວິນຍານທີກະບົດຕໍ່ສູ້ພຣະເຈົ້າ.
  ວິນຍານເຫລົ່ານີ້ບົ່ງບອກເຖິງການ "ລົງ" ໄປສູ່ແດນມໍລະນາ. ຊຶ່ງແຕກຕ່າງກັນກັບການ "ຂຶ້ນ" ໄປແຜ່ນດິນສະຫວັນ,
  ສະຖານທີວິນຍານຂອງຄົນທີເຊື່ອໃນພຣະເຢຊູຄຣິດເຈົ້າປະທັບຢູ່.
- ຄຳວ່າ "ແດນມໍລະນາ" ແມ່ນຄູ່ກັບຄຳວ່າ "ຄວາມຕາຍ" ໃນພຣະທຳພຣະນິມິດ.
  ໃນຄາວສຸດທ້າຍທັ້ງຄວາມຕາຍແລະແດນມໍລະນາຈະຖືກຖິ້ມລົງບຶງໄຟຊຶ່ງເອີນວ່າບາລົກ.

### ຄຳແນະນຳໃນການແປ

- ໃນພັນທະສັນຍາເດີມຄຳວ່າ "ແດນຄົນຕາຍ" ສາມາດແປວ່າ "ສະຖານທີແຫ່ງຄວາມຕາຍ" ຫລື
  "ສະຖານທີສຳລັບວິນຍານຜູ້ທີຕາຍແລ້ວ" ການແປບາງສ່ວນຄື "ຂຸມບາລົກ" ຫລື "ຄວາມຕາຍ," ຂຶ້ນຢູ່ກັບບໍລິບົດ.
- ໃນພັນທະສັນຍາໃໝ່ຄຳວ່າ "ແດນມໍລະນາ" ສາມາດແປວ່າ "ສະຖານທີສຳລັບຄົນຕາຍທີບໍ່ເຊື່ອ" ຫລື
  "ສະຖານທີແຫ່ງຄວາມທຸກທໍລະມານສຳລັບຄົນຕາຍ" ຫລື "ສະຖານທີສຳລັບວິນຍານຂອງຄົນທີບໍ່ເຊື່ອ."
- ຄຳແປບາງສະບັບຍັງຮັກສາຄຳວ່າ "ແດນຄົນຕາຍ" ຫລື "ແດນມໍລະນາ,"
  ການສະກົດຄຳໃຫ້ເໝາະສົມກັບຮູບແບບສຽງຂອງພາສາໃນການແປ.

## ແຕ່ງຕັ້ງ, ຖືກແຕ່ງຕັ້ງ

### ນິຍາມ

ຄຳວ່າ "ແຕ່ງຕັ້ງ" ແລະ "ຖືກແຕ່ງຕັ້ງ" ໝາຍ ເຖິງການເລືອກເອົາຜູ້ໃດຜູ້ໜຶ່ງເພື່ອປະຕິບັດໜ້າທີຫຼືບົດບາດສະເພາະ.

- ເພື່ອ "ຖືກແຕ່ງຕັ້ງ" ຍັງສາມາດ ໝາຍເຖິງການຖືກ "ເລືອກ" ເພື່ອຈະໄດ້ຮັບບາງສິ່ງບາງຢ່າງຄືໃນ "ແຕ່ງຕັ້ງໃຫ້ມີຊີວິດນິຣັນດອນ". ນີ
  ໝາຍ ຄວາມວ່າພວກເຂົາຖືກເລືອກໃຫ້ໄດ້ຮັບຊີວິດນິຣັນດອນ.
- ຄຳວ່າ "ເວລາ ກຳນົດ" ໝາຍເຖິງ "ເວລາທີຖືກເລືອກໄວ້" ຫລື "ເວລາທີວາງແຜນໄວ້" ສຳ ລັບບາງສິ່ງທີເກີດຂຶ້ນ.
- ຄຳວ່າ "ແຕ່ງຕັ້ງ" ກໍອາດຈະໝາຍ ເຖິງ "ຄຳສັ່ງ" ຫລື "ມອບ ໝາຍ" ໃຫ້ຜູ້ໃດຜູ້ ໜຶ່ງເຮັດຫຍັງ.


generated on Thu Jul 10 08:45:04 2025

### ຄຳແນະນຳໃນການແປ

- ອີງຕາມສະພາບການ, ວິທີການແປ "ແຕ່ງຕັ້ງ" ສາມາດປະກອບມີ, "ເລືອກ" ຫຼື "ມອບ ໝາຍ" ຫລື "ເລືອກຢ່າງເປັນທາງການ" ຫຼື "ແຕ່ງຕັ້ງ."
- ຄຳວ່າ "ແຕ່ງຕັ້ງ" ສາມາດແປເປັນ, "ມອບ ໝາຍ" ຫລື "ວາງແຜນ" ຫລື "ເລືອກໂດຍສະເພາະ."
- ປະໂຫຍກທີ່ວ່າ "ໄດ້ຮັບການແຕ່ງຕັ້ງ" ຍັງສາມາດແປເປັນ "ຖືກເລືອກ."

## ແຕ່ງຕັ້ງ, ສະຖາປະນາ

### ນິຍາມ

ການແຕ່ງຕັ້ງ ຫລືສະຖາປະນາບຸກຄົນ ຫມາຍເຖິງການແຕ່ງຕັ້ງບຸກຄົນ ເພື່ອພາລະກິດ ຫລືບົດບາດພິເສດ. ຍັງ ໝາຍເຖິງການບັນຍັດກົດເກນ ຫລືຄຳສັ່ງ ຢ່າງເປັນທາງການອີກດ້ວຍ.

- ຫລາຍເທື່ອຄຳວ່າ "ແຕ່ງຕັ້ງ, ສະຖາປະນາ" ອ້າງເຖິງການແຕ່ງຕັ້ງ ຢ່າງເປັນທາງການບາງຄົນ ໃຫ້ເປັນປະໂລຫິດ, ສາສນາຈານ, ຫລືອາຈານ.
- ຍົກຕົວຢ່າງເຊັ່ນຄຳວ່າ, ພຣະເຈົ້າ ຊົງແຕ່ງຕັ້ງ ອາໂຣນແລະ ລູກຫລານຂອງອາໂຣນ ໃຫ້ເປັນພວກປະໂລຫິດ.
- ຍັງສາມາດແປໄດ້ ສ້າງ ຫລືສະຖາປະນາບາງສິ່ງ, ເຊັ່ນ: ການລ້ຽງສະຫລອງ ທາງສາສນາ ຫລື ພັນທະສັນຍາ.
- ຂຶ້ນຢູ່ກັບບໍຣິບົດ, "ແຕ່ງຕັ້ງ, ສະຖາປະນາ" ສາມາດແປໄດ້ວ່າ "ມອບ ໝາຍ ຫນ້າທີ" ຫລື "ແຕ່ງຕັ້ງ ໃຫ້ເປັນ" ຫລື "ອອກຄຳສັ່ງ" ຫລື "ຕັ້ງກົດເກນ" ຫລື "ສະຖາປະນາ."

## ແຫ

### ນິຍາມ

ຄຳວ່າ "ແຫ" ນັ້ນ ໝາຍເຖິງການແຫ ບາງສິ່ງດ້ວຍວັດຖຸທີ່ມີຄວາມຄົມ ແລະ ປາຍແຫຼມ
ນອກຈາກນີ້ຍັງໃຊ້ໃນເຊິ ງອຸປະມາອຸປະໄມ ອ້າງເຖິງການ ກໍ ໃຫ້ ເກີດ ຄວາມ ເຈັບ ປວດ ທາງ ອາ ລົມ ແກ່ ບາງ ຄົນ

- ທະຫານ ໄດ້ ໃຊ້ ຫອກ ແຫງ ຂ້າງ ການ ຂອງ ພຣະ ເຢ ຊູ ເມື ອ ທີ ໄມ້ ກາງ ແຂນ ນັ ນ
- ໃນ ສະ ໄໝ ຂອງ ພຣະ ຄຳ ພີ ຂ້າ ທາດ ທີ ໄດ້ ຮັ ບ ການ ປົ ດ ປ່ ອ ຍ ຈະ ຖືກ ເຈາະ ຫູ ເປັ ນ ສັ ນ ຍາ ລັ ກ ໃນ
  ການ ເລືອກ ທີ ຈະ ຮັ ບ ໃຊ້ ເຈົ ້ ານ າຍ ຂອງ ຕົ ນ ຕໍ ່ ໄປ
- ສີ ເມ ໂອ ນ ໄດ້ ກ ລ ່ າ ວ ໃນ ເຊິ ງ ອຸ ປະ ມາ ອຸ ປະ ໄມ ກັ ບ ມາ ຣີ ວ ່ າ
  ຫ ົ ວ ໃຈ ຂ ອ ງ ນ າ ງ ຈ ະ ຖ ື ກ ດ າ ບ ແ ຫ ງ ທ ະ ລ ຸ ຊ ຶ ງ ໝ າ ຍ ຄ ວ າ ມ ວ ່ າ ນ າ ງ ຈ ະ ປ ະ ສ ົ ບ ກ ັ ບ ຄ ວ າ ມ ໂ ສ ກ ເ ສ ົ ້ າ ຢ ່ າ ງ ຫ ລ າ ຍ ເ ນ ື ່ ອ ງ ດ ້ ວ ຍ ເ ຫ ຕ ຜ ົ ນ ທ ີ ຈ ະ ເ ກ ີ ດ ຂ ຶ ້ ນ ກ ັ ບ ພ ຣ ະ ເ ຢ ຊ ູ ບ ຸ ດ ຊ າ ຍ

## ແທ່ນບູຊາ

### ນິຍາມ

ແທ່ນ ບູ ຊາ ເປັ ນ ບ ່ ອ ນ ສ ້ າ ງ ສູ ງ ທ ີ ຕ ັ ້ ງ ຂ ຶ ້ ນ ຈ າ ກ ພ ື ້ ນ ຂ ຶ ້ ນ ມ າ ຊ ຶ ່ ງ ຄ ົ ນ ອ ິ ສ ະ ຣ າ ເ ອ ນ ໃ ຊ ້ ເ ປ ັ ນ ບ ່ ອ ນ ເ ຜ ົ ້ າ ສ ັ ດ
ແ ລ ະ ເ ມ ັ ດ ພ ື ດ ຕ ່ າ ງ ໆ ເ ພ ື ່ ອ ເ ປ ັ ນ ບ ູ ຊ າ ຖ ວ າ ຍ ແ ດ ່ ພ ຣ ະ ເ ຈ ົ ້ າ .

- ໃ ນ ສ ะ ໄ ໝ ຂ ອ ງ ພ ຣ ะ ຄ ั ม ภ ี แ ท ่ น บ ู ช า ย ่ า ง ง ่ า ย ๆ
  ม ั ก จ ะ ท ำ ข ึ ้ น ม า จ า ก ก า ร ป ั ้ น ข ึ ้ น เ ป ็ น ร ู ป ห ร ื อ ก า ร เ อ ิ ้ ก ้ อ น ห ิ น ก ้ อ น ใ ห ญ ่ ม า เ ร ี ย ง ก ั น ข ึ ้ น ใ ช ้ ฟ ั น ด ิ บ .
- แ ท ่ น บ ู ช า แ บ บ พ ิ เ ศ ษ บ า ง ช น ิ ด ท ี เ ป ็ น ร ู ป ช ิ ้ น ท ี ่ แ ล ้ ว ก ็ จ ะ ท ำ ม า จ า ก ไ ม ้ แ ล ้ ว ห ุ ้ ม ห ร ื อ ต ก แ ต ่ ง ด ้ ว ย ท อ ง ค ำ ห ร ื อ ท อ ง ส ำ ร ิ ด .
- ป ะ ร ำ พ ิ ธ ี ท ี ่ ม ี ก า ร ถ ว า ย ส ั ต ว ์ ห ร ื อ ว ั ต ถ ุ อ ื ่ น ๆ ก ็ ม ั ก จ ะ ม ี ก า ร ส ร ้ า ง แ ท ่ น บ ู ช า ข ึ ้ น ช ั ่ ว ค ร า ว เ พ ื ่ อ ถ ว า ย บ ู ช า แ ด ่ พ ร ะ เ จ ้ า

## ແທ່ນວາງຕີນ, ແທ່ນຮອງພຣະບາດ

### ນິຍາມ

ຄຳວ່າ "ແທ່ນວາງຕີນ" ກ່າວເຖິງສິ່ງຂອງທີ່ຄົນເອົາໄວ້ໃຊ້ວາງຕີນຂອງເຂົາ, ມັກເອົາໄວ້ເພື່ອພັກຕີນ ລະຫວ່າງທີ່ນັ່ງ.
ຄຳນີ້ມີຮູບໃຊ້ແບບປຽບທຽບ ໝາຍເຖິງການຍອມຈຳນົນ ແລ ສະຖານະພາບທີ່ຕ່ຳກ່ວາ.

- ຜູ້ ຄົ ນ ໃ ນ ສ ะ ໄ ໝ ພ ร ะ ค ั ม ภ ี ไ ด ้ ผ ิ จ า ร ะ น า ว ่ า ต ี น ค ื ส ่ ว น ท ี ่ ม ี ก ฽ ด น ้ อ ย ท ี ่ ส ุ ด ข อ ง ร ่ า ง ก า ย . ด ั ง น ั ้ น "แ ท ่ น ว า ง ต ี น"
  ก ำ จ ะ ย ึ ง ม ี ก ฽ ด ท ี ต ่ ำ ก ่ า ว า เ พ ื ่ อ ว ่ า เ อ ็ า ไ ว ้ เ ป ็ น ท ี ่ พ ั ก ต ี น .


generated on Thu Jul 10 08:45:04 2025

- ເມື່ອພຣະເຈົ້າບອກວ່າ "ເຮົາຈະທຳໃຫ້ສັດຕູຂອງເຮົາເປັນແທ່ນວາງຕີນສຳລັບຕີນຂອງເຮົາ" ພຣະອົງກຳລັງປະກາດອຳນາດ,
  ການຄວບຄຸມ,ແລະໄຊຊະນະເໜືອຄົນເຫຼົ່ານັ້ນ ທີ່ກະບົດຕໍ່ຕ້ານພຣະອົງ.
  ພວກເຂົາຈະຖືກທຳໃຫ້ຖ່ອມລົງແລະຖືກປາບຈົນເຖິງຈຸດທີ່ຕ້ອງຍອມຈຳນົນຕໍ່ນ້ຳພຣະທັຍຂອງພຣະເຈົ້າ.
- ທີ່ຈະ "ນະມັດສະການແທ່ນຮອງພຣະບາດພຣະເຈົ້າ" ໝາຍເຖິງການກົ້ມກາບນະມັດສະການຕໍ່ໜ້າພຣະອົງ
  ໃນຂະນະທີ່ພຣະອົງຊົງປະທັບຢູ່ເທິງບັນລັງຂອງພຣະອົງ.ໃນຕອນນີ້ຄວາມໝາຍທີ່ສື່ກໍຄືຄວາມຖ່ອມແລະການຍອມຕໍ່ພຣະເຈົ້າ.
- ດາວິດອ້າງເຖິງພຣະວິຫານວ່າເປັນ "ແທ່ນຮອງພຣະບາດ"
  ພຣະເຈົ້າ.ປະໂຫຍກນີ້ບົ່ງບອກເຖິງສິດອຳນາດທັງໝົດທີ່ພຣະອົງມີເໜືອປະຊາກອນຂອງພຣະອົງ,ຄຳນີ້ສາມາດບົ່ງບອກໃຫ້ເຫັນພາບວ່າ
  ພຣະເຈົ້າເປັນກະສັດເທິງບັນລັງຂອງພຣະອົງ,ພຣະບາດຂອງພຣະອົງວາງເທິງແທ່ນຮອງພຣະບາດ,ນີ້ສະແດງໃຫ້ເຫັນເຖິງທຸກສິ່ງທີ່ຕ້ອງຍອມຈຳນົນຕໍ່ພຣະ

## ແທ່ນເຜົາເຄື່ອງຫອມ

### ນິຍາມ

ແທ່ນເຜົາເຄື່ອງຫອມເປັນເຄື່ອງໃຊ້ອັນໜຶ່ງທີ່ປະໂລຫິດຈະໃຊ້ເຜົາເຄື່ອງຫອມໃຫ້ເຜົາບູຊາແດ່ພຣະເຈົ້າແລະມີຊື່ເອີ້ນອີກວ່າແທ່ນບູຊາທອງຄຳ.

- ແທ່ນເຜົາເຄື່ອງຫອມທຳຈາກໄມ້ ແລະດ້ານເທິງແລະດ້ານຂ້າງຈະຖືກຫຸ້ມດ້ວຍທອງຄຳ
  ມີຄວາມຍາວປະມານເຄິ່ງແມັດຄວາມກວ້າງເຄິ່ງແມັດ ແລະຄວາມສູງໜຶ່ງແມັດ.
- ໃນຕອນທຳອິດແທ່ນນີ້ຈະຖືກເກັບໄວ້ໃນພັບພາ ຕໍ່ມາຖືກເກັບໄວ້ໃນພຣະວິຫານ.
- ທຸກຕອນເຊົ້າແລະຕອນແລງ ປະໂລຫິດທ່ານຈະເຜົາເຄື່ອງຫອມເທິງແທ່ນບູຊາ.
- ຄຳນີ້ສາມາດແປໄດ້ອີກວ່າ"ແທ່ນສຳຫລັບໃຊ້ເຜົາເຄື່ອງຫອມ" ຫຼື "ແທ່ນບູຊາທອງຄຳ" ຫຼື "ທີ່ເຜົາເຄື່ອງຫອມ" ຫຼື "ໂຕະເຄື່ອງຫອມ"

## ແບ້

### ນິຍາມ

ແບ້ ເປັນສັດຂະໜາດກາງໆ, ເປັນສັດສີຂາວ ຄ້າຍກັບແກະແລະເປັນສັດທີ່ບໍ່ໃຫ້ນົມແລະເອົາໃຊ້ກິນຊີ້ນ. ລູກອ່ອນຂອງແບ້ເອີ້ນວ່າ"ລູກແບ້."

- ເໝືອນກັບແກະ, ແບ້ເປັນສັດທີ່ສຳຄັນສຳລັບການເຜົາບູຊາ ໂດຍສະເພາະເທສະການປັດສະຄາ.
- ເຖິງແມ່ນວ່າແບ້ມີຄວາມຄ້າຍຄືແກະແຕ່ກໍມີຄວາມແຕກຕ່າງບາງຢ່າງທີ່ເຫັນໄດ້ຢ່າງຈະແຈ້ງ.
- ແບ້ມີຂົນສີເຂັ້ມແລະຫຍາບ, ແຕ່ແກະມີຂົນເປັນປຸຍ.
- ແບ້ມີຫາງທີ່ຕັ້ງຊີ ແຕ່ຫາງແກະຫ້ອຍລົງ.
- ແກະໂດຍປົກກະຕິມັກຢູ່ຢ່າງປອດພັຍກັບຝູງຂອງພວກມັນ ແຕ່ແບ້ຈະມີຄວາມເປັນເອກະເທດແລະມັກທີ່ຈະຫ່ອງຫ່ຽວໄປຈາກຝູງ.
- ໃນສະໄມັຍພຣະຄັມພີ, ແບ້ເປັນແຫຼ່ງໃຫ້ນ້ຳນົມຫລັກໆ ກັບຄົນອິສະຣາເອນ.
- ໜັງແບ້ຖືກໃຊ້ເປັນເຕັ້ນເພື່ອປົກຄຸມແລະຖົ່ງໜັງສຳລັບໃສ່

ເຫຼົ້າອາງຸ່ນ.

- ທັ່ງໃນພັນທະສັນຍາເດີມແລະໃໝ່, ແບ້ຖືກໃຊ້ເປັນສັນຍາລັກຂອງຄົນອະທັມ,
  ບາງທີອາດຈະເປັນເພາະແນວໂນ້ມຂອງພວກມັນທີ່ຈະຍ່າງອອກຫ່າງຈາກຄົນທີ່ດູແລພວກມັນ.
- ຊົນຊາດອິສະຣາເອນໃຊ້ແບ້ເປັນສັນຍາລັກແຍກຮັບຄວາມບາບຄວ້ຍ .ເມື່ອແບ້ຕົວໜຶ່ງຖືກຖວາຍເປັນສັດບູຊາ
  ປະໂລຫິດຈະເອົາມືວາງເທິງແບ້ຕົວທີ່ສອງແລະສົ່ງເຂົ້າໄປໃນທະເລຊາຍເພື່ອເປັນສັນຍາລັກຂອງສັດທີ່ແຍກຮັບຄວາມບາບຂອງມະນຸດ.

## ແຜ່ນດິນແຫ່ງພະສັນຍາ

### ນິຍາມ

ຄຳວ່າ "ແຜ່ນດິນແຫ່ງພະສັນຍາ" ມີຢູ່ໃນເລືອງຣາວຂອງພະຄັມພີເທົ່ານັ້ນ ບໍ່ແມ່ນຂໍ້ຄວາມພະຄັມພີ
ແຕ່ເປັນທາງເລືອກໜຶ່ງທີ່ອ້າງເຖິງແຜ່ນດິນຄານາອັນທີ່ພະເຈົ້າໄດ້ຊົງສັນຍາໄວ້ວ່າຈະປະທານແກ່ອັບຣາຮັມແລະລູກຫຼານຂອງທ່ານ

- ເມື່ອອັບຣາຮັມຍັງຢູ່ທີ່ເມືອງເອີ ພະເຈົ້າໄດ້ຊົງບັນຊາທ່ານໃຫ້ໄປຢູ່ໃນແຜ່ນດິນຄານາອັນ ທ່ານແລະລູກຫຼານຂອງທ່ານ ຊາວອິສຣາເອນ
  ໄດ້ຢູ່ບ່ອນນັ້ນຫຼາຍປີ
- ເມື່ອເກີດການກັນດານອາຫານຢ່າງຮຸນແຮງເຮັດໃຫ້ບ່ອນນັ້ນບໍ່ມີອາຫານໃນຄານາອັນ ຊາວອິສຣາເອນຈຶ່ງໄດ້ຍ້າຍໄປຢັງອີຢິບ
- ສີ່ຮ້ອຍປີຕໍ່ມາ
  ພະເຈົ້າໄດ້ຊົງຊ່ວຍກູ້ຊົນຊາດອິສຣາເອນຈາກການເປັນຂ້າທາດໃນອີຢິບແລະໄດ້ນຳພວກທ່ານກັບມາຍັງຄານາອັນແຜ່ນດິນຊຶ່ງພະເຈົ້າໄດ້ຊົງສັນຍາຈະປະທ


generated on Thu Jul 10 08:45:04 2025

% ຄຳແນະນຳໃນການແປ

- ຄຳວ່າ "ແຜ່ນດິນແຫ່ງພະສັນຍາ" ສາມາດແປວ່າ "ແຜ່ນດິນທີ່ພະເຈົ້າໄດ້ຕົກລົງວ່າພະອົງຈະປະທານໃຫ້ແກ່ອັບຣາຮັມ" ຫລື "ແຜ່ນດິນທີ່ພະເຈົ້າຊົງສັນຍາແກ່ອັບຣາຮັມ" ຫລື "ແຜ່ນດິນພະເຈົ້າຊົງສັນຍາກັບປະຊາ ກອນຂອງພະອົງ" ຫລື "ແຜ່ນດິນຄານາອັນ"
- ໃນພະຄັມພີ ຄຳນີ້ປາກົດໃນຮູບແບບຂອງ "ແຜ່ນດິນທີ່ພະເຈົ້າຊົງສັນຍາໄວ້"

## ແມ່ນ້ຳຈໍແດນ, ຈໍແດນ

### ຂໍ້ເທັດຈິງ

ແມ່ນ້ຳຈໍແດນເປັນແມ່ນນ້ຳທີ່ໄຫລແຕ່ເໜືອຮອດໃຕ້, ແລະເປັນເຂດແດນທາງຕາເວັນອອກຂອງດິນແດນທີ່ຖືກເອີ້ນວ່າການາອານ.

- ທຸກມື້ນີ້, ແມ່ນ້ຳຈໍແດນໄດ້ແຍກອິດສະຣາເອນທາງທິດຕາເວັນຕົກຈາກຈໍແດນທາງທິດຕາເວັນອອກ.
- ແມ່ນ້ຳຈໍແດນໄຫລຜ່ານທະເລຄາລີເລແລ້ວຈຶ່ງໄຫລລົງໄປສູ່ທະເລຕາຍ.
- ເມື່ອໂຢຊວຍໄດ້ນຳອິດສະຣາເອນເຂົ້າສູ່ການາອານ, ພວກເຂົາໄດ້ຂ້າມແມ່ນ້ຳຈໍແດນ. ເນື່ອງຂາກນ້ຳນັ້ນເລິກຫລາຍ, ພຣະເຈົ້າເຮັດການອັດສະຈັນໄດ້ຫຍຸດນ້ຳບ່ໃຫ້ໄຫລ ສະນັ້ນພວກເຂົາຈຶ່ງສາມາດຂ້າມນ້ຳໄປໄດ້.
- ຫລາຍຄັ້ງໃນພຣະຄຳພີ ແມ່ນ້ຳຈໍແດນຖືກເອີ້ນວ່າ“ແມ່ນ້ຳຈໍແດນ“

## ແມ່ນ້ຳນິນ, ແມ່ນ້ຳແຫ່ງອີຢິບ

### ຂໍ້ເທັດຈິງ

ແມ່ນ້ຳນິນແມ່ນແມ່ນ້ຳສາຍຫີຍາວແລະກວ້າງໃນທິດຕາເວັນອອກສຽງເໜືອຂອງອັຍຟະຣິກາ
ເປັນທີ່ຮູ້ຈັກກັນດີວ່າແມ່ນ້ຳສາຍດັ່ງກ່າວນີ້ເປັນແມ່ນ້ຳສາຍຫຼັກຂອງປະເທດອີຢິບ

- ແມ່ນ້ຳນິນໄຫຼຈາກທິດເໜືອຜ່ານປະເທດອີຢິບລົງສູ່ທະເລເມດິແຕເຣເນ
- ພືດພັນສາມາດເຕີບໂຕໄດ້ດີຕາມຕະຝັ່ງສອງຂ້າງຂອງແມ່ນ້ຳນິນເຊິ່ງມີຄວາມອຸດົມສົມບູນຢ່າງຫຼວງຫຼາຍ
- ຊາວອີຢິບສ່ວນຫລາຍຈະອາໃສຢູ່ໃກ້ກັບແມ່ນ້ຳນິນເນື່ອງຈາກແມ່ນ້ຳດັ່ງກ່າວເປັນແຫຼ່ງນ້ຳແລະອາຫານທີ່ສຳຄັນ
- ຊາວອິດສະຣາເອນສ່ວນຫຼາຍ ອາໃສຢູ່ໃນແຜ່ນດິນໂກເຊັນເຊິ່ງມີຄວາມອູດົມສົມບູນຢ່າງຫຼາຍເນື່ອງຈາກຕັ້ງຢູ່ຕິດກັບແມ່ນນ້ຳນິນ
- ເມື່ອໂມເຊຍັງເປັນທາດນັ້ນ
  ພໍ່ແມ່ຂອງໂມເຊໄດ້ນຳລາວເຂົ້າໄປໄວ້ໃນກະຕ່າຖ້ຳມກາງຕົ້ນອ້ໃນແມ່ນ້ຳນິນເພື່ອເຊື່ອງໂມເຊໃຫ້ພົ້ນຈາກຄົນຂອງຟາໂຣ

## ແມ່ນ້ຳເອີຟຣັດ

### ຂໍ້ເທັດຈິງ

ເອີຟຣັດ ແມ່ນຊື່ໜຶ່ງໃນແມ່ນ້ຳສີ່ສາຍທີ່ໄຫລຜ່ານສວນເອເດນ. ເປັນແມ່ນ້ຳທີ່ຖືກເວົ້າເຖິງຫລາຍທີ່ສຸດໃນພຣະຄຳພີ.

- ໃນປະຈຸບັນ ແມ່ນ້ຳທີ່ຖືກເອີ້ນວ່າເອີຟຣັດໄດ້ຕັ້ງຢູ່ແຖວຕາເວັນອອກກາງ ແລະເປັນແມ່ນ້ຳທີ່ຍາວທີ່ສຸດແລະສຳຄັນທີ່ສຸດໃນອາຊີ.
- ເມື່ອໄຫລໄປລວມກັບແມ່ນ້ຳຕິກຣິດ, ແມ່ນ້ຳເອີຟຣັດໄດ້ເປັນເຂດແດນຂອງແຜ່ນດິນທີ່ຮູ້ຈັກກັນທີ່ມີຊື່ວ່າ ເມໂສໂປຕາເມຍ.
- ເມືອງບູຮານເອີ ຊຶ່ງເປັນເມືອງທີ່ອັບຣາຮາມໄດ້ອອກມາຈາກເມືອງນັ້ນ ແມ່ນຕັ້ງຢູ່ປາກແມ່ນ້ຳເອີຟຣັດນີ.
- ແມ່ນ້ຳນີ້ແມ່ນສາຍໜຶ່ງໃນເຂດຂອງແຜ່ນດິນທີ່ພຣະເຈົ້າໄດ້ ສັນຍາວ່າຈະມອບໃຫ້ແກ່ອັບຣາຮາມ (ປຖກ 15:18).
- ບາງເທື່ອແມ່ນ້ຳເອີຟຣັດໄດ້ຖືກເອີ້ນງ່າຍໆວ່າ "ແມ່ນ້ຳ."

## ແມ່ພິມ

### ນິຍາມ

ແມ່ພິມແມ່ນຊິ້ນສ່ວນທີ່ເຮັດດ້ວຍໄມ້, ໂລຫະ, ຫລືດິນໜຽວທີ່ຖືກນຳໃຊ້ເພື່ອປະດິດວັດຖຸສິ່ງຂອງອອກຈາກ ຄຳ, ເງິນ,
ຫລືວັດຖຸອື່ນໆທີ່ສາມາດເຮັດໃຫ້ອ່ອນລົງແລະຈາກນັ້ນກໍປະກອບເປັນຮູບຮ່າງໂດຍແມ່ພິມ.

- ແມ່ພິມຖືກໃຊ້ເພື່ອເຮັດເຄື່ອງປະດັບ, ຖ້ວຍແລະເຄື່ອງໃຊ້ ສຳ ລັບກິນ ແລະ ສິ່ງອື່ນໆ.
- ໃນພຣະຄັມພີ, ແມ່ພິມຖືກກ່າວເຖິງສ່ວນໃຫຍ່ກ່ຽວຂ້ອງກັບຮູບປັ້ນ ແມ່ພິມເພື່ອໃຊ້ເປັນຮູບປັ້ນພຣະປອມ.
- ໂລຫະຕ້ອງໄດ້ຮັບການໃຫ້ຄວາມຮ້ອນກັບອຸນຫະພູມທີ່ສູງຫຼາຍເພື່ອໃຫ້ພວກມັນສາມາດເທລົງໃສ່ແມ່ພິມໄດ້.


generated on Thu Jul 10 08:45:04 2025

- ການປັ້ນບາງສິ່ງບາງຢ່າງ
  ໝາຍເຖິງການປະກອບວັດຖຸໃຫ້ເປັນຮູບຊົງຫລືຮູບຊົງຄ້າຍຄືກັນໂດຍການໃຊ້ແມ່ພິມຫລືມືເພື່ອປະກອບເປັນຮູບຊົງທີ່ແນ່ນອນ.

%ຄໍາແນະນໍາໃນການແປ

- ຄໍາສັບນີ້ຍັງສາມາດຖືກແປເປັນ, "ເພື່ອປະກອບ" ຫຼື "ສ້າງຮູບຮ່າງ" ຫຼື "ສ້າງ."
- ຄໍາວ່າ“ ປັ້ນ” ສາມາດແປເປັນ“ ຮູບຊົງ” ຫລື“ ສ້າງຕັ້ງຂຶ້ນ”.
- ວັດຖຸ“ ແມ່ພິມ” ສາມາດແປເປັນຄໍາເວົ້າຫລື ຄໍາສັບທີ່ມີຄວາມໝາຍວ່າ“ ພາຊະນະທີ່ມີຮູບຊົງ” ຫຼື“ ຈານທີ່ໃຊ້ແກະສະຫຼັກ.”

## ແລ່ນ, ການແລ່ນ

### ນິຍາມ

ຕາມຕົວອັກສອນຄໍາວ່າ "ແລ່ນ"
ອ້າງເຖິງການເຄື່ອນທີ່ດ້ວຍຕີນຢ່າງວ່ອງໄວ,ໂດຍຫົວໄປຈະກ້າວຕີນໄວກ່ວາການຍ່າງ.ຄວາມໝາຍຫຼັກຂອງຄໍາວ່າ "ແລ່ນ"
ຍັງໃຊ້ໃນສໍານວນແບບປຽບທຽບດັ່ງຕໍ່ໄປນີ້ດ້ວຍເຊັ່ນກັນ.

- "ແລ່ນຢ່າງທີ່ຈະຄ້ວາເອົາລາງວັນ" ອ້າງເຖິງ
  ບາກບັ່ນໃນການກະທໍາຕາມພຣະປະສົງຂອງພຣະເຈົ້າເໝືອນກັບການບາກບັ່ນແລ່ນແຂ່ງເພື່ອໄຊຊະນະ.
- "ແລ່ນໃນທາງແຫ່ງພຣະບັນຍັດຂອງທ່ານ" ໝາຍເຖິງ ເຊື່ອຟັງພຣະບັນຍັດຂອງພຣະເຈົ້າດ້ວຄວາມຍິນດີແລະຢ່າງທັນທີທັນໃດ.
- "ຕິດຕາມພຣະອື່ນໆ" ໝາຍເຖິງຢັ້ງຢືນໃນການນະມັດສະການພຣະອື່ນໆ.
- "ຂ້າພະເຈົ້າແລ່ນເຂົ້າມາຫາພຣະອົງເພື່ອລີ້ຊ່ອນຂ້າພະເຈົ້າ
  ໝາຍເຖິງການຫັນໄປຫາພຣະເຈົ້າຢ່າງໄວວາເພື່ອການລີ້ພັຍແລະຄວາມປອດພັຍເມື່ອຕ້ອງພົບກັບຄວາມຍາກລໍາບາກ.

ຄວາມໝາຍໃນທາງປຽບທຽບອື່ນໆຂອງຄໍາວ່າ "ແລ່ນ":

- ນ້ໍາແລະຂອງແຫຼວອື່ນໆ ຢ່າງເຊັ່ນນ້ໍາຕາ,ເລືອດ,ເຫື່ອ,ແລະແມ່ນ້ໍາຈະຖືກເວົ້າວ່າ "ແລ່ນ," ນີ້ສາມາດແປໄດ້ວ່າ "ໄຫຼ."
- ເຂດແດນຂອງປະເທດຫຼືຂອບເຂດໄດ້ຖືກເວົ້າວ່າ "ແລ່ນຂະໜານ" ແມ່ນ້ໍາຫຼືເຂດແດນຂອງປະເທດອື່ນ ສາມາດແປໄດ້ວ່າ "ຂອບເຂດຂອງມັນຢູ່ຕິດກັບ" ຫຼື "ຊາຍແດນຂອງ."
- ແມ່ນ້ໍາແລະລໍາທານຕ່າງໆສາມາດ "ແລ່ນເຖິງເຫືອດແຫ້ງ" ຊຶ່ງໝາຍເຖິງວ່າບໍ່ມີນ້ໍາໃນແມ່ນ້ໍາແລະລໍາທານອີກ, ນີ້ຍັງສາມາດແປໄດ້ວ່າ "ໄດ້ແຫ້ງໄປແລ້ວ" ຫຼື "ກາຍເປັນແຫ້ງແລ້ງໄປແລ້ວ."
- ວັນແຫ່ງງານສະຫຼອງສາມາດ "ແລ່ນ" ໄປເຖິງການສິ້ນສຸດ, ຊຶ່ງໝາຍເຖິງວັນເຫຼົ່ານັ້ນ "ຜ່ານໄປແລ້ວ" ຫຼື "ເສັດສິ້ນໄປແລ້ວ" ຫຼື "ຈົບໄປແລ້ວ."

## ແສ້, ໄມ້ແສ້

### ນິຍາມ

ຄໍາ ວ່າ“ ໄມ້ແສ້” ໝາຍ ເຖິງເຄື່ອງມືທີ່ຄ້າຍຄືແຄບ, ແຂງ, ແລະແຂງເຊິ່ງໃຊ້ໃນຫຼາຍວິທີທາງທີ່ແຕກຕ່າງກັນ.
ຢ່າງຫນ້ອຍມັນອາດຈະເປັນໄມ້ໃນຄວາມຍາວປະມານແມັດ.

- ຄົນລ້ຽງແກະໃຊ້ໄມ້ຄ້ອນເທົ້າເພື່ອປ້ອງກັນຝູງແກະຈາກສັດອື່ນໆ. ມັນຍັງຖືກໂຍນລົງສູ່ຝູງແກະທີ່ຫລົງທາງເພື່ອເອົາມັນກັບມາຝູງແກະ.
- ໃນເພງສັນລະເສີນບົດທີ 23, ກະສັດດາວິດໄດ້ໃຊ້ ຄໍາວ່າ, "ໄມ້ ເທົ້າ" ແລະ "ພະນັກງານ" ເປັນຄໍາປຽບທຽບເພື່ອກ່າວເຖິງການຊີ້ ນໍາ ແລະການຕີສອນຂອງພຣະເຈົ້າສໍາລັບປະຊາຊົນຂອງພຣະ ອົງ.
- ໄມ້ເທົ້າຂອງຜູ້ລ້ຽງແກະຍັງຖືກໃຊ້ເພື່ອນັບແກະໃນຂະນະທີ່ພວກມັນຜ່ານມັນໄປ.
- ການສະແດງແບບປຽບທຽບອີກຢ່າງ ໜຶ່ງ, "ໄມ້ຕີເຫຼັກ," ໝາຍ
  ເຖິງການລົງໂທດຂອງພຣະເຈົ້າສໍາລັບຄົນທີ່ກະບົດຕໍ່ລາວແລະເຮັດສິ່ງທີ່ຊົ່ວ.
- ໃນສະ ໄໝ ບູຮານ, ການວັດແທກເຊືອກເຮັດດ້ວຍໂລຫະ, ໄມ້ຫລືຫີນແມ່ນໃຊ້ເພື່ອວັດແທກຄວາມຍາວຂອງອາຄານຫລືວັດຖຸ.
- ໃນພຣະຄໍາພີໄມ້ຄ້ອນໄມ້ຍັງຖືກເອີ້ນວ່າເປັນເຄື່ອງມືໃນການຕີສອນເດັກນ້ອຍ.


generated on Thu Jul 10 08:45:04 2025

## ແອກ

### ນິຍາມ

ແອກແມ່ນທ່ອນໄມ້ຫລືໂລຫະທີ່ເອົາໄປວາງເທິງຄໍສັດສອງຕົວຫລືຫລາຍກວ່ານັ້ນເພື່ອລ່ວມສັດໃນການແກ່ຄັນໄຖຫລືແກ່ກວ້ນ ມີຄວາມໝາຍທີ່ປຽບທຽບຢ່າງຫຼວງຫຼາຍສຳລັບຄຳນີ.

- ຄຳວ່າ " ແອກ "ໄດ້ຖືກໃຊ້ໃນຄຳອຸປະມາອຸປະວິໃນທີ່ອ້າງເຖິງບາງສິ່ງທີ່ຮວມປະຊາຊົນສຳລັບວັດຖຸປະສົງໃນການເຮັດວຽກຮ່ວມກັນ ເຊັ່ນການຮັບໃຊ້ອົງພຣະເຢຊູ.
- ໂປໂລໄດ້ໃຊ້ຄຳວ່າ " ເພື່ອນຮ່ວມແອກ" ໃນການອ້າງອີງເຖິງບາງຄົນຜູ້ທີ່ກຳລັງຮັບໃຊ້ພຣະເຢຊູເຊັ່ນດຽວກັນວ່າ " ເພື່ອນຄົນຮັບໃຊ້" ຫລື" ເພື່ອນຜູ້ຮັບໃຊ້ "ຫລື " ເພື່ອນຮ່ວມງານຮັບໃຊ້ ".
- ຄຳວ່າ " ແອກ " ຍັງໃຊ້ຢູ່ເປັນປະຈຳໃນການປຽບທຽບເປັນຄຳອຸປະມາທີ່ອ້າງເຖິງພາລະໜັກແລະບາງຄົນຕ້ອງແບກ ເຊັ່ນຖືກກົດຂີ່ເມື່ອຕົກເປັນຫາດຫລືຖືກຂົ່ມເຫັງ.
- ສ່ວນໃຫຍ່ ຈະເປັນການຕີທີ່ສຸດທີ່ຈະແປຄຳນີ້ຕາມຕົວອັກສອນໃຊ້ຄຳທ້ອງຖິ່ນທີ່ວ່າ ແອກ ທີ່ໃຊ້ໃນການກະເສດຕະກຳ.
- ທາງອື່ນໃນການແປໃນຄຳອຸປະມາອຸປະວິໃນຂອງຄຳນີອາດຈະເປັນ " ພາລະທີ່ກົດດັນ " ຫລື " ພາລະໜັກ " ຫລື " ຜູກມັດ "ຂຶ້ນຢູ່ກັບກໍລະນີນັ້ນໆ".

## ແອວ

### ນິຍາມ

ຄຳວ່າ '' ແອວ " ອ້າງເຖິງສ່ວນຮ່າງກາຍຂອງສັດ ຫລື ບຸກຄົນທີ່ຢູ່ລະຫວ່າງກະດູກຊີ່ກໂຄງດ້ານລຸ່ມກັບກະດູກເຊິງກາມ ຫລື ຮູ້ຈັກກັນດີວ່າ ທ້ອງນ້ອຍ.

- ຄຳກ່າວ " ຈົ່ງຄາດແອວ " ອ້າງເຖິງການຕຽມຕົວເຮັດວຽກຫນັກ ມັນມາຈາກທຳນຽມການປັກຊາຍເສື້ອຄຸມຂຶ້ນໄປທີ່ເຂັມຂັດຮອບແອວເພື່ອທີ່ຈະເຄື່ອນໄຫວໄດ້ສະດວກ.
- ຄຳວ່າ " ແອວ " ໄດ້ຖືກນຳໃຊ້ຢູ່ເລື້ອຍໆໃນພຣະຄຳພີອ້າງເຖິງສ່ວນລຸ່ມດ້ານຫລັງຂອງສັດທີ່ຖະຫວາຍບູຊາ.
- ໃນພຣະຄຳພີ ຄຳວ່າ " ແອວ " ມັກຈະອ້າງໃນເຊິ່ງອຸປະມາຫລາຍຄັ້ງ ແລະ ເປັນຄຳ ສະລະສະຫລວຍທີ່ໃຊ້ກັບອະໄວຍະວະໃນການສືບພັນຂອງຜູ້ຊາຍ ເປັນຄືກັບແຫຼ່ງທີ່ມາຂອງເຊື້ອສາຍຂອງເຂົາ.
- ຄຳກ່າວ " ຈະມາຈາກແອວຂອງທ່ານ " ສາມາດແປວ່າ " ຈະເປັນລູກຫລານຂອງທ່ານ " ຫລື " ຈະເກີດຈາກເມັດພັນຂອງທ່ານ " ຫລື " ພຣະເຈົ້າຈະເຮັດໃຫ້ມາຈາກທ່ານ. "
- ເມື່ອອ້າງເຖິງສ່ວນຮ່າງກາຍ ນີ້ສາມາດແປວ່າ " ທ້ອງ " ຫລື " ແອວ " ຂຶ້ນຢູ່ກັບສະພາບແວດລ້ອມ.

## ໂກດຮ້າຍ, ໂມໂຫ, ພຣະພິໂຣດ

### ນິຍາມ

ການ "ໂກດຮ້າຍ" ຫຼື "ໂມໂຫ" ໝາຍເຖິງການບໍ່ພໍໃຈຢ່າງແຮງ ທາງຫວີດແລະບໍ່ພໍໃຈໃນບາງຢ່າງຫຼືໃນບາງຄົນ.

- ເມື່ອມະນຸດໂກດຮ້າຍ ມັກຈະເປັນຄວາມບາບແລະເຫັນແກ່ຕົວ ແຕ່ບາງຄັ້ງກໍເປັນການໂກດຮ້າຍທີ່ຊອບທັມຕໍ່ສູ້ກັບຄວາມອະຍຸດຕິທັມຫຼືການກົດຂີ່ຂົ່ມເຫັງ.
- ຄວາມໂກດຮ້າຍຂອງພຣະເຈົ້າ(ທີ່ເອີ້ນວ່າ ພຣະພິໂຣດ)ສະແດງເຖິງຄວາມບໍ່ພໍພຣະທັຍຢ່າງຍິ່ງຂອງພຣະອົງຕໍ່ບາບ.
- ຄຳວ່າ "ຍຸຍົງໃຫ້ໂກດຮ້າຍ" ໝາຍຄວາມວ່າ "ທຳໃຫ້ເກີດຄວາມໂກດຮ້າຍ."

## ໂກລະໂກທາ

### ຂ້ເທັດຈິງ

ຄຳວ່າ "ໂກລະໂກທາ" ຄືສະຖານທີ່ທີ່ພຣະເຢຊູຖືກຄຶງ. ຄຳນີ້ມາຈາກ ພາສາອາຣັບໝາຍເຖິງ "ກະໂຫລກ" ຫລື "ສະຖານທີ່ແຫ່ງຫົວ ກະໂຫລກ."

- ໂກລະໂກທາຕັ້ງຢູ່ດ້ານນອກກຳແພງເມືອງບາງແຫ່ງໃກ້ກັບ


generated on Thu Jul 10 08:45:04 2025

ນະຄອນເຢຣູຊາເລັມ, ບາງທີອາດຈະຕັ້ງທີ່ເທິງຫາງຜຽງຜູເຂົາ ຫມາຍຄວາມວ່າ.

- ໃນພຣະຄໍາພີພາສາອັງກິດຕ້ົງເດີມ,ໂກລະໂກທາຖືກແປວ່າ "ແຄວວາຣີ," ຊຶ່ງມາຈາກພາສາລາຕິນແປວ່າ "ກະໂຫລກ"
- ພຣະຄໍາພີຫລາຍສະບັບໃຊ້ຄໍາທີ່ເໝືອນກັນຄືຄໍາວ່າ "ໂກລະໂກທາ," ຄວາມໝາຍຂອງຄໍານີ້ກໍໄດ້ອະທິບາຍໄວ້ໃນຂ້ພຣະຄໍາພີ. ແລະສາມາດເບິ່ງລິ້ງດ້ານລຸ່ມໄດ້ວ່າແປຄໍານີ້ຢ່າງໃດ.

## ໂກລີອາດ

### ຂ້ເທັດຈິງ

ໂກລີອາດເປັນທະຫານຕົວສູງໃຫຍ່ຫລາຍໃນກອງທັບຂອງຄົນ ຟີລິດສະຕິນທີ່ດາວິດຂ້າຕາຍ.

- ໂກລີອາດສູງປະມານສອງເຖິງສາມແມັດ, ຫລາຍຄັ້ງຈະຖືກເວົ້າເຖິງວ່າເໝືອນຍັກເພາະດວ້ຍຂະໜາດຕົວທີ່ໃຫຍ່ໂຕຂອງເຂົາ.
- ເຖິງແມ່ນວ່າໂກລີອາດໄດ້ມີອາວຸດທີ່ດີກວ່າແລະຕົວໃຫຍ່ຫລາຍກ່ວາດາວິດ,ພຣະເຈົ້າໄດ້ຊົງໃຫ້ກໍາລັງແກ່ດາວິດແລະຄວາມສາມາດທີ່ຈະປາບໂກລີອາດ.
- ຊົນຊາດອິສະຣາເອນໄດ້ປະກາດຊັຍຊະນະເໜືອຄົນຟີລິດສະຕິນດວ້ຍຜົນຂອງຊັຍຊະນະຂອງດາວິດເໜືອໂກລີອາດ.

## ໂກເຊນ

### ຂ້ເທັດຈິງ

ໂກເຊນ ເປັນຊື່ຂອງດິນແດນທີ່ອຸດົມສົມບູນທີ່ຕ້ັງລຽບຕາມຝັ່ງແມ່ນ້ໍານາຍ ໃນສ່ວນຕອນເໜືອຂອງອີຢິບ.

- ເມື່ອໂຢເຊັບເປັນຜູ້ປົກຄອງໃນອີຢິບ,
  ພໍ່ແລະພີ່ນອ້ງຂອງເຂົາແລະຄອບຄົວຂອງເຂົາໄດ້ມາອາໃສຢູ່ທີ່ເມືອງໂກເຊນເພື່ອໝີການກັນດານອາຫານໃນການາອານ.
- ພວກເຂົາແລະລູກຫລານຂອງພວກເຂົາໄດ້ອາໃສຢູ່ໃນເມືອງໂກເຊນຢ່າງດົນກ່ວາ 400 ປີ
  ແລ້ວຖືກພວກເຂົາບັງຄັບໃຫ້ເປັນໂດຍຟາຣາໂອກະສັດຂອງເອຢິບ.
- ໃນທ້ີສຸດພຣະເຈົ້າໄດ້ສົ່ງໂມເຊໃຫ້ໄປຊ່ວຍຄົນອິສະຣະເອນອອກຈາກເມືອງໂກເຊນແລະໜີຈາກການເປັນທາດນ.

## ໂກເນລີໂອ

### ຂ້ເທັດຈິງ

ໂກເນລີໂອເປັນຊາວຕ່າງຊາດ, ບໍ່ແມ່ນຊາວຢິວ, ຊຶ່ງເປັນນາຍທະຫານໃນກອງທັບໂຣມັນ.

- ເຂົາໄດ້ອະທິຖານເປັນປະຈໍາຕໍ່ພຣະເຈົ້າແລະມີໃຈກວ້ໍາງຂວ້ໍາງໃນການໃຫ້ທານຄົນຍາກຈົນ.
- ເມື່ອໂກເນລີໂອແລະຄອບຄົວຂອງເຂົາໄດ້ຮັບຟ້ັງອັກຄະສາວົກເປໂຕອະທິບາຍເລື້ອງພຣະກິດຕິຄຸນ,
  ພວກເຂົາຈ້ຶງກາຍເປັນຜູ້ເຊ ື່ອໃນພຣະເຢຊູ.
- ຄົນໃນຄົວເຮືອນຂອງໂກເນລີໂອເປັນຄົນກຸ່ມທໍາອິດທີ່ບໍ່ແມ່ນຊາວຢິວທີ່ກາຍມາເປັນຜູ້ເຊ ື່ອໃນພຣະເຢຊູຄຣິດ.
- ເລື້ອງນ ີ້ສະແດງໃຫ້ເຫັນວ່າບັນດາສາວົກຂອງພຣະເຢຊູໄດ້ມາເພ ື່ອຊ່ວຍທຸກຄົນລວມທ ັ້ງຄົນຕ່າງຊາດ, ໃຫ້ໄດ້ຮັບຄວາມລອດພ ົ້ນ.

## ໂກໂມຣາ

### ຂ້ເທັດຈິງ

ໂກໂມຣາ ເປັນເມືອງທ ີ່ຕ ັ້ງຢ ູ່ໃນຮ ່ອມພ ູທ ີ່ອ ຸດົມສ ົມບ ູນແຕ ່ງ
ນ ຶ,ທ ່ຽງຕ າເວ ັ້ນອ ອກຂ ອງເມ ືອງໂຊໂດມສ ະຖ ານທ ີ່ຫ ລ ານອ ັ ບຣ າຮ າມຄ ຶໂລດໄ ດ ້ເ ລ ືອກທ ີ່ຈ ະມ ີຊ ີ ວ ິດ.

- ສ ະຖ ານທ ີ່ແ ນ ່ນ ອ ນຂ ອງ ໂກໂ ມ ຣ າ
  ແ ລ ະເ ມ ືອ ງໂ ຊ ໂ ດ ມ ບ ໍ ໄ ດ ້ເ ປ ັ ນ ທ ີ ຣ າ ບ ,ແ ຕ ່ມ ີ ຂ ້ ບ ຶ ງ ຊ ີ ຫ ລ າ ຍ ຢ ່ າ ງ ທ ີ ່ ທ ັ ້ ງ ສ ອ ງ ເ ມ ືອ ງ ມ ີ ອ າ ດ ຈ ະ ຕ ັ ້ ງ ຢ ູ ່ ທ ່ ຽ ງ ຕ ອ ນ ໃ ຕ ້ ຂ ອ ງ ທ ະ ເ ລ ເ ກ ືອ ,ໃ ກ ້ ກ ັ ບ ຮ ່ ອ ມ ພ ູ ຊ ິ ດ ຕ ິ ມ .
- ມ ີ ກ ະ ສ ັ ດ ຫ ລ າ ຍ ອ ່ ງ ທ ີ ່ ເ ຮ ັ ດ ສ ່ ງ ຄ ວ າ ມ ໃ ນ ບ ໍ ລ ິ ເ ວ ນ ທ ີ ່ ຕ ັ ້ ງ ຂ ອ ງ ເ ມ ືອ ງ ໂ ຊ ໂ ດ ມ ແ ລ ະ ເ ມ ືອ ງ ໂ ກ ໂ ມ ຣ າ .
- ເ ມ ື ່ ອ ຄ ອ ບ ຄ ົ ວ ຂ ອ ງ ໂ ລ ດ ຖ ືກ ຈ ັ ບ ໃ ນ ຂ ້ ຂ ັ ດ ແ ຍ ້ ງ ລ ະ ຫ ວ ່ າ ງ ເ ມ ືອ ງ ໂ ຊ ໂ ດ ມ ແ ລ ະ ເ ມ ືອ ງ ອ ື ນ ,ອ ັ ບ ຣ າ ຮ າ ມ ແ ລ ະ ຄ ົ ນ ຂ ອ ງ ເ ຂ ົ າ ຊ ່ ວ ຍ ຊ ີ ວ ິ ດ ພ ວ ກ ເ ຂ ົ າ ເ ອ ົ າ ໄ ວ ້ .
- ບ ໍ ດ ົ ນ ຫ ລ ັ ງ ຈ າ ກ ນ ັ ້ ນ ພ ຣ ະ ເ ຈ ົ າ ໄ ດ ້ ທ ໍ າ ລ າ ຍ ເ ມ ືອ ງ ໂ ຊ ໂ ດ ມ ແ ລ ະ ເ ມ ືອ ງ ໂ ກ ໂ ມ ຣ າ ເ ພ າ ະ ຄ ວ າ ມ ຊ ົ ວ ຮ ້ າ ຍ ຂ ອ ງ ຜ ູ ້ ອ າ ໃ ສ ຢ ູ ່ ທ ີ ່ ນ ັ ້ ນ .


generated on Thu Jul 10 08:45:04 2025

## ໂຄຣາ

### ຂໍ້ເທັດຈິງ

ໂຄຣາ ຄືຊື່ຂອງຄົນສາມຄົນໃນພັນທະສັນຍາເດີມ.

- ນຶ່ງໃນລູກຊາຍຂອງເອຊາວຊື່ວ່າ ໂຄຣາ ເຂົາໄດ້ເປັນຜູ້ນຳຂອງຄົນນຶ່ງໃນຊຸມຊົນຂອງເຂົາ.
- ໂຄຣາ
  ເປັນເຊື້ອສາຍຂອງເລວີແລະໄດ້ຮັບໃຊ້ໃນຫໍເຕັ້ນຖານະປະໂລຫິດເຂົ້າອີດສາໂມເຊແລະອາໂຣນແລະໄດ້ນຳກຸ່ມຜູ້ຊາຍກະບົດຕໍ່ພວກເຂົາ.
- ຜູ້ຊາຍທີ່ຊື່ ໂຄຣາ ຄົນທີສາມຢູ່ໃນລາຍຊື່ຂອງລູກຫຼານຂອງຢູດາ.

## ໂຊດົມ

### ຂໍ້ເທັດຈິງ

ໂຊດົມເປັນເມືອງທີ່ຢູ່ຕອນໃຕ້ຂອງການາອານ ຊຶ່ງເປັນສະຖານທີ່ຫລານຊາຍຂອງອັບຣາຮາມ ຄື
ໂລດອາໄສຢູ່ກັບພັນລະຍາແລະລູກຫຼານຂອງທ່ານ.

- ແຜ່ນດິນຂອງພື້ນທີ່ອ້ອມເມືອງໂຊດົມເປັນພື້ນທີ່ຊຸ່ມນ້ຳແລະອຸດົມສົມບູນ,
  ດັ່ງນັ້ນຈຶ່ງນັ້ນເປັນທີ່ທີ່ໂລດໄດ້ເລືອກທີ່ຈະອາໄສຢູ່ໃນຕອນທີ່ຕັ້ງຖິ່ນຖານໃນການາອານ.
- ສະຖານທີ່ຕັ້ງທີ່ແນ່ນອນຂອງເມືອງນີ້ບໍ່ເປັນທີ່ຮູ້ແຈ້ງ ເພາະວ່າເມືອງໂຊດົມ ແລະ ເມືອງທີ່ຢູ່ໃກ້ເມືອງ

ໂກໂມຣາທັ້ງໝົດຖືກພຣະເຈົ້າຊົງທຳລາຍຢ່າງສິ້ນຊາກ ເພື່ອເປັນການລົງໂທດສິ່ງຊົ່ວຮ້າຍທີ່ປະຊາຊົນໄດ້ກະທຳຢູ່

- ຄວາມບາບທີ່ຊົ່ວຮ້າຍທີ່ສຸດທີ່ປະຊາຊົນໃນເມືອງໂຊດົມແລະເມືອງໂກໂມຣາກະທຳຢູ່ຄືການຮັກຮ່ວມເພດ.

## ໂຊອາ

### ຂໍ້ເທັດຈິງ

ໂຊອາ ເປັນເມືອງນ້ອຍໆ ທີ່ໂລດ ໄດ້ຫລົບໜີເມື່ອພຣະເຈົ້າຊົງທຳລາຍເມືອງໂຊໂດມແລະເມືອງໂກໂມຣາ.

- ຊື່ທີ່ເປັນຄົນຮູ້ຈັກກັນກ່ອນໜ້ານີ້ຄື "ເບລາ" ແຕ່ໄດ້ຖືກຕັ້ງຊື່ໃໝ່ວ່າ

"ໂຊອາ" ເມື່ອໂລດໄດ້ທູນຂໍພຣະເຈົ້າບໍ່ໃຫ້ສະງວນເມືອງ "ນ້ອຍໆ" ນີ້ໄວ້.

- ໂຊອາ ໄດ້ຄິດກັນວ່າເມືອງນີ້ໄດ້ຕັ້ງຢູ່ເທິງບ່ອນຮາບພຽງຂອງແມ່ນ້ຳຈໍແດນຫລືທາງຕອນໃຕ້ສຸດຂອງທະເລຕາຍ.

## ໂຊໂລໂມນ

### ຂໍ້ເທັດຈິງ

ໂຊໂລໂມນເປັນໜຶ່ງໃນລຸກຂອງກະສັດດາວິດ ມານດາຂອງພຣະອົງຄືບັດເຊບາ.

- ເມື່ອໂຊໂລໂມນໄດ້ເປັນກະສັດແລ້ວ, ພຣະເຈົ້າໄດ້ຊົງບອກພຣະອົງວ່າໃຫ້ຂໍຫຍັງກໍໄດ້ທີ່ກະສັດໂຊໂລໂມນຕ້ອງການ.
  ດັ່ງນັ້ນໂຊໂລໂມນຈຶ່ງທູນຂໍສະຕິປັນຍາທີ່ຈະປົກຄອງປະຊາກອນຂອງພຣະອົງຢ່າງຊື່ກົງແລະດີ.
  ພຣະເຈົ້າຊົງພໍພຣະໄທຄຳທູນຂໍຂອງກະສັດໂຊໂລໂມນຈຶ່ງປະທານທັ້ງສະຕິປັນຍາແລະຄວາມມັ່ງຄັ່ງຮັ່ງມີໃຫ້ພຣະອົງ.
- ກະສັດໂຊໂລໂມນມີຊື່ສຽງໃນດ້ານການສ້າງພຣະວິຫານທີ່ສຳຄັນແລະສວຍງາມໄວ້ໃນກຸງເຢຣູຊາເລັ້ມ.
- ເຖິງແມ່ນວ່າກະສັດໂຊໂລໂມນໄດ້ຊົງປົກຄອງຢ່າງມີສະຕິປັນຍາໃນຊ່ວງຕົ້ນຂອງການປົກຄອງຂອງພຣະອົງ,
  ແຕ່ຕໍ່ມາພຣະອົງຊົງແຕ່ງງານກັບຍິງຊາວຕ່າງຊາດຢ່າງໂງ່ເງົ່າແລະເລີ່ມນະມັດສະການບັນດາພຣະຂອງຜູ້ຍິງເຫລົ່ານັ້ນ.
- ເພາະຄວາມບໍ່ຊື່ສັດຂອງກະສັດໂຊໂລໂມນ,
  ຫລັງການສິ້ນພຣະຊົນຂອງພຣະອົງພຣະເຈົ້າໄດ້ຊົງແບ່ງແຍກຄົນອິດສະຣາເອນເປັນສອງອານາຈັກ ເປັນອິດສະຣາເອນແລະຢູດາ,
  ທັ້ງສອງອານາຈັກກໍຕໍ່ສູ້ກັນເລື້ອຍມາ.


generated on Thu Jul 10 08:45:04 2025

## ໂຕອູດ

### ນິຍາມ

ໂຕອູດ ແມ່ນສັດໂຕໃຫຍ່ໂຕໜຶ່ງ, ທີ່ມີສີຂາ ທີ່ມີໜອກສອງໜອກທາງຫລັງຂອງມັນ.

## ໂທມາ

### ຂໍ້ເທັດຈິງ

ໂທມາເປັນໜຶ່ງໃນສິບສອງຄົນທີ່ພຣະເຢຊູຊົງເລືອກໃຫ້ເປັນສາວົກຂອງພຣະອົງແລະຕໍ່ມາ,
ຄືລາວເປັນອັກຄະສາວົກເປັນທີ່ຮູ້ຈັກໃນຖານະ"ດີໄດມັດ" ເຊິ່ງແປວ່າ "ຝາແຝດ".

- ໃກ້ຈະເຖິງຊ່ວງຊີວິດຊ່ວງສຸດທ້າຍໃນຊີວິດຂອງພຣະເຢຊູ,
  ພຣະອົງຊົງບອກພວກສາວົກຂອງພຣະອົງວ່າພຣະອົງກຳລັງຈະຈາກໄປຢູ່ກັບພຣະບິດາແລະໄປຈັດຕຽມສະຖານທີ່ໃຫ້ກັບພວກເຂົາເພື່ອຢູ່ກັບພຣະອົງ.
  ໂທມາໄດ້ທູນຖາມພຣະເຢຊູວ່າພວກເຂົາຈະຮູ້ໄດ້ຢ່າງໃດວ່າທາງທີ່ຈະໄປນັ້ນແມ່ນທາງໃດໃນເມື່ອບໍ່ຮູ້ວ່າພຣະອົງຈະໄປທາງໃດ.
- ພາຍຫລັງພຣະເຢຊູສິ້ນພຣະຊົນແລະຊົງຄືນພຣະຊົນ
  ໂທມາໄດ້ກ່າວວ່າລາວຈະບໍ່ເຊື່ອວ່າພຣະເຢຊູຊົງມີຊີວິດຢູ່ຈົນກວ່າລາວຈະໄດ້ເຫັນແລະຈັບຕ້ອງຮອຍບາດແຜທີ່ພຣະເຢຊູໄດ້ຊົງຮັບບາດເຈັບ.

## ໂນອາ

### ຂໍ້ເທັດຈິງ

ໂນອາຄືຜູ້ຊາຍຜູ້ມີຊີວິດຢູ່ເມື່ອ 4,000 ກວ່າປີມາແລ້ວ ເມື່ອຄາວທີ່ພຣະເຈົ້າຊົງໃຫ້ນ້ຳຖ້ວມໂລກເພື່ອທຳລາຍຄົນຊົ່ວທູກຄົນໃນໂລກ
ພຣະເຈົ້າຊົງສັ່ງໃຫ້ໂນອາສ້າງເຮືອຂະໜາດໃຫຍ່ລຳໜຶ່ງ
ເຊິ່ງເຂົາແລະຄອບຄົວຂອງເຂົາຈະສາມາດອາໄສຢູ່ໃນຂະນະທີ່ນ້ຳຖ້ວມທົ່ວແຜ່ນດິນໂລກ.

- ໂນອາເປັນຜູ້ຊາຍທີ່ມີຄວາມຊອບທຳຜູ້ເຊິ່ງເຊື່ອຟັງພຣະເຈົ້າໃນທຸກສິ່ງ.
- ເມື່ອພຣະເຈົ້າຊົງບອກໃຫ້ໂນອາສ້າງເຮືອລຳໃຫຍ່ນັ້ນ ໂນອາໄດ້ເຮັດຕາມທີ່ພຣະເຈົ້າຊົງສັ່ງທຸກປະການ.
- ພາຍໃນເຮືອນັ້ນໂນອາແລະຄອບຄົວຂອງເພິ່ນໄດ້ອາໄສຢູ່ທີ່ນັ້ນຢ່າງປອດໄພ
  ພາຍຫລັງລູກຫລານຂອງໂນອາກໍໄດ້ແຜ່ຫລາຍເຕັມໂລກນີ້ອີກຄັ້ງ.
- ທຸກຄົນທີ່ເກີດໃນສະໄໝນ້ຳຖ້ວມນັ້ນສືບເຊື້ອສາຍມາຈາກໂນອາ.

## ໂບອາດ

### ຂໍ້ເທັດຈິງ

ໂບອາດແມ່ນຊາວອິດສະລາແອນເຊິ່ງເປັນພີ່ນ້ອງຂອງນາງຣູເຊິ່ງເປັນພໍ່ຕູ້ໃຫຍ່ຂອງກະສັດດາວິດແລະເປັນເຊື້ອສາຍຂອງພຣະເຢຊູຄຣິດ.

- ໂບອາດອາໄສຢູ່ໃນຊ່ວງເວລາທີ່ມີຜູ້ພິພາກສາໃນອິດສະຣາເອນ.
- ລາວເປັນຍາດພີ່ນ້ອງຂອງຜູ້ຍິງຊາວອິດສະລາເອນຊື່ນາໂອມີຜູ້ທີ່ໄດ້ກັບມາປະເທດອິດສະລາແອນຫລັງຈາກສາມີແລະລູກຊາຍຂອງນາງຕາຍຢູ່ປະເທດໂມ
- ນາງໂບອາດໄດ້“ ໄຖ່” ລູກສາວທີ່ເປັນເມຍທີ່ເປັນເມຍຂອງນາໂອມີໂດຍນາງ ຣູ
  ໂດຍໄດ້ແຕ່ງດອງກັບນາງແລະໃຫ້ອະນາຄົດກັບຜົວແລະລູກ.
- ລາວຖືກວ່າເປັນຮູບພາບຂອງວິທີທີ່ພຣະເຢຊູຊົງຊ່ວຍຊີວິດແລະໄຖ່ພວກເຮົາຈາກບາບ.

## ໂປຕີຟາ

### ຂໍ້ເທັດຈິງ

ໂປຕີຟາເປັນເຈົ້າໜ້າທີ່ສຳຄັນຄົນໜຶ່ງຂອງຟາໂຣແຫ່ງເອຢິບໃນຊ່ວງເວລາໂຢເຊັບຖືກຂາຍໃຫ້ເປັນທາດຂອງຊາວອິດຊະມາເອນ.

- ໂປຕີຟາໄດ້ຊື້ໂຢເຊັບຈາກຊາວອິດຊະມາເອນ ແລະໄດ້ແຕ່ງຕັ້ງເຂົາໃຫ້ເປັນຫົວໜ້າໃນຄົວເຮືອນຂອງເຂົາ.
- ເມື່ອໂຢເຊັບຖືກກ່າວຫາຢ່າງບໍ່ຖືກຕ້ອງວ່າໄດ້ເຮັດຜິດ ໂປຕີຟາຈຶ່ງໄດ້ຂັງໂຢເຊັບໄວ້ໃນຄຸກ.


generated on Thu Jul 10 08:45:04 2025

## ໂປໂລ, ໂຊໂລ

### ຂ້ເທັດຈິງ

ໂປໂລຄືຜູ້ນຳຂອງຄຣິດສະຈັກໃນຍຸກເລີ່ມຕົ້ນເຊິ່ງພຣະເຢຊູໄດ້ສົ່ງອອກໄປເພື່ອປະກາດຂ່າວປະເສີດແກ່ກຸ່ມຊົນຊາດທັ້ງຫຼາຍ.

- ໂປໂລເປັນຊາວຢິວເຊິ່ງກຳເນີດໃນເມືອງຂອງໂຣມ ເມືອງໜຶ່ງຊື່ເມືອງທາຊັດ ດ້ວຍເຫດນີ້ໂປໂລຈຶ່ງເປັນຊາວໂຣມ.
- ໂປໂລ ເດີມນັ້ນມີຊື່ຢິວວ່າໂຊໂລ.
- ໂຊໂລໄດ້ກາຍມາເປັນຜູ້ນຳສາດສະໜາຊາວຢິວແລະໄດ້ເກີດການຈັບກຸມຊາວຢິວຊຶ່ງປ່ຽນມາເປັນຄຣິດສະຕຽນເພາະຫ່ານຄິດວ່າຫ່ານເຫຼົ່ານັ້ນບໍ່ສັດຊື່ຕໍ່ພ
- ພຣະເຢຊູຊຶ່ງເປີດເຜີຍພຣະອົງແກ່ໂປໂລໃນແສງສະຫວ່າງກ້າຈາກທ້ອງຟ້າ ແລະຊຶ່ງກ່າວແກ່ໂຊໂລໃຫ້ຫ່ານຢຸດຂົ່ມເຫັງຄຣິດສະຕຽນ.
- ໂຊໂລໄດ້ເຊື່ອໃນພຣະເຢຊູແລະໄດ້ເລີ່ມຕົ້ນສັ່ງສອນບັນດາຊາວຢິວກ່ຽວກັບພຣະເຢຊູ.
- ຕໍ່ມາພາຍຫຼັງພຣະເຈົ້າໄດ້ຊົງສົ່ງໂຊໂລໄປສັ່ງສອນປະຊາຊົນທີ່ບໍ່ແມ່ນຊາວຢິວກ່ຽວກັບພຣະເຢຊູແລະໄດ້ເລີ່ມກໍ່ຕັ້ງຄຣິດສະຕະຈັກຕ່າງໆ ໃນເມືອງຫຼາຍເມືອງຂອງອານາຈັກໂຣມ. ໃນເວລານີ້ເອງທີ່ຫ່ານຖືກເອີ້ນລາວດ້ວຍຊື່ໂຣມວ່າ "ໂປໂລ."
- ນອກຈາກນີ້ໂປໂລຍັງໄດ້ຂຽນຈົດໝາຍຫຼາຍສະບັບເພື່ອໜູນໃຈແລະສັ່ງສອນຄຣິດສະຕຽນໃນຄຣິສຕະຈັກຕ່າງໆ. ຈົດໝາຍຫຼາຍສະບັບເຫຼົ່ານີ້ຢູ່ໃນພັນທະສັນຍາໃໝ່.

## ໂມຣະເດໄຄ

### ຂ້ເທັດຈິງ

ໂມຣະເດໄຄ ເປັນຜູ້ຊາຍຊາວຢິວທີ່ຢູ່ໃນປະເທດເປີເຊຍ, ເຂົາເປັນອົງຄະລັກ ເອສະເທີ ຍາດຜູ້ຕໍ່ມາໄດ້ເປັນເມຍຂອງ ອາຫັດສຸເອລັດ ກະສັດຂອງເປີເຊຍ.

- ຂະນະທີ່ທຳງານຢູ່ທີ່ວັງໂມຣະເດໄຄ ໄດ້ຍິນພວກຜູ້ຊາຍໃນວັງວາງແຜນຈະຂ້າກະສັດ ອາຫັດສຸເອລັດ.ເຂົາໄດ້ລາຍງານເລື່ອງນີ້ແລ້ວຊີວິດຂອງກະສັດກໍ່ປອດໄພ.
- ຫລາຍປີຕໍ່ມາ ໂມຣະເດໄຄ ໄດ້ຮູ້ລ່ວງໜ້າເຖິງການວາງແຜນຂ້າຄົນຍິວທັ້ງໝົດໃນອານາຈັກເປີເຊຍ. ແລະເຂົາໄດ້ແນະນຳ ເອສະເທີ ໃຫ້ທູນເລື່ອງນີ້ຕໍ່ກະສັດເພື່ອຊ່ວຍເຫລືອປະຊາຊົນ.

## ໂມອາບ, ຊາວໂມອາບ

### ຂ້ເທັດຈິງ

ໂມອາບ ເປັນຊື່ລູກຊາຍຂອງລູກສາວຄົນໂຕຂອງໂລດຕໍ່ມາຈຶ່ງກາຍເປັນຊື່ຂອງດິນແດນທີ່ໂມອາບແລະຄອບຄົວໂມອາບອາໃສຢູ່ ຄຳວ່າ "ຊາວໂມອາບ" ອ້າງເຖິງບຸກຄົນທີ່ສືບເຊື້ອສາຍມາຈາກໂມອາບ ຫຼືຜູ້ທີ່ອາໃສຢູ່ໃນປະເທດຊື່ວ່າໂມອາບ.

- ປະເທດໂມອາບຕັ້ງຢູ່ທາງທິດຕະເວັນຂອງທະເລເກືອ.
- ໂມອາບຕັ້ງຢູ່ທາງຕາເວັນອອກສ່ຽງໃຕ້ຈາກເມືອງເບັດເລເຮັມທີ່ຄອບຄົວນາງນາໂອມີອາໃສຢູ່.
- ປະຊາຊົນໃນເບັດເລເຮັມເອີ້ນນາງຣຸດວ່າເປັນ "ຍິງຊາວໂມອາບ" ເພາະວ່ານາງຣຸດເປັນຍິງທີ່ມາຈາກປະເທດໂມອາບ ຄຳນີ້ສາມາດແປໄດ້ວ່າ "ຍິງຊາວໂມອາບ" ຫຼື "ຍິງຈາກປະເທດໂມອາບ."

## ໂມເຊ

### ຂ້ເທັດຈິງ

ໂມເຊ ເປັນຜູ້ປະກາດພຣະທັມແລະເປັນຜູ້ນຳຊາວອິດສະຣາເອນມາເປັນເວລາ 40 ກວ່າປີ.

- ຕອນທີ ໂມເຊ ຍັງເປັນເດັກນ້ອຍ, ພໍ່ແມ່ຂອງ ໂມເຊ ໄດ້ເອົາລາວໃສ່ໃນກະຕ່າທີ່ຢູ່ໃນປ່າຫຍ້າຂອງແມ່ນ້ຳໄນເພື່ອປົກປ້ົດລາວຈາກກະສັດຟາໂຣແຫ່ງເອຢິບ. ເອື້ອຍຂອງໂມເຊ ມີຣີອາມ ໄດ້ເຝົ້າເບິ່ງລາວຢູ່ທີ່ນັ້ນ. ຊີວິດຂອງໂມເຊໄດ້ລອດເມື່ອລູກສາວຂອງຟາໂຣໄດ້ພົບລາວແລະໄດ້ພາລາວໄປທີ່ວັງເພື່ອລ້ຽງດູລາວເປັນລູກຊາຍຂອງນາງ.
- ພຣະເຈົ້າໄດ້ເລືອກ ໂມເຊ ໃຫ້ປົດປ່ອຍຊາວອິດສະຣາເອນອອກຈາກການເປັນຂ້າທາດໃນປະເທດອີຢິບແລະ ນຳພວກເຂົາໄປສູ່ດິນແດນທີ່ພຣະອົງໄດ້ສັນຍາໄວ້.
- ຫລັງຈາກຊາວອິດສະຣາເອນໄດ້ໜີຈາກປະເທດອີຢິບແລະໃນຂະນະທີ່ພວກເຂົາເດີນທາງໄປໃນທະເລຊາຍ, ພຣະເຈົ້າໄດ້ປະທານຫີນສອງແຜ່ນພ້ອມດ້ວຍພຣະບັນຍັດສິບປະການຂຽນໃສ່ໃນຫີນນັ້ນໃຫ້ແກ່ ໂມເຊ.


generated on Thu Jul 10 08:45:04 2025

- ໃນຕອນທ້າຍຂອງຊີວິດຂອງລາວ, ໂມເຊ ໄດ້ເຫັນແຜ່ນດິນທີ່ໄດ້ສັນຍາໄວ້,
  ແຕ່ລາວບໍ່ໄດ້ເຂົ້າໄປຢູ່ໃນແຜ່ນດິນນັ້ນເພາະລາວບໍ່ເຊື່ອຟັງພຣະເຈົ້າ.

## ໂມເລັກ, ໂມລົອກ

### ຂໍ້ເທັດຈິງ

ໂມເລັກເປັນຊື່ໜຶ່ງຂອງພຣະປອມທີ່ຊາວຄານາອານນະມັດສະການ ອາດມີການສະກົດຊື່ອີກວ່າ "ໂມລົອກ" ແລະ"ໂມເລັກ"

- ປະຊາຊົນທີ່ນະມັດສະການພຣະໂມເລັກໂດຍການບູຊາຢັນເດັກນ້ອຍທັ້ງຫລາຍໂດຍການເຜົາໄຟ.
- ປະຊາຊົນອິດສະຣາເອນບາງຄົນໄດ້ນະມັດສະການພຣະໂມເລັກແທນການນະມັດສະການພຣະເຈົ້າຫ່ຽງແທ້ ຄືພຣະເຈົ້າຢາເວ
  ພວກເຂົາໄດ້ປະຕິບັດຕາມພວກທີ່ນະມັດສະການພຣະໂມເລັກໄດ້ກະທຳລວມທັງການບູຊາຢັນເດັກນ້ອຍຂອງພວກເຂົາ.

## ໂຢຊວຍ

### ຂໍ້ເທັດຈິງ

ມີຜູ້ຊາຍຫລາຍຄົນໃນອິດສະຣາເອນທີ່ຊື່ວ່າໂຢຊວຍໃນພຣະຄຳພີ,
ແຕ່ຄົນທີ່ຮູ້ຈັກກັນດີທີ່ສຸດແມ່ນໂຢຊວຍລູກຊາຍຂອງນູນຜູ້ທີ່ເປັນຜູ້ຊ່ວຍຂອງໂມເຊແລະຜູ້ທີ່ຕໍ່ມາກາຍເປັນຜູ້ນຳທີ່ສຳຄັນຂອງປະຊາຊົນຂອງພຣະເຈົ້າ.

- ໂຢຊວຍແມ່ນໜຶ່ງໃນສິບສອງຄົນຜູ້ສອດແນມທີ່ໂມເຊໄດ້ສົ່ງໄປສຳຫລວດແຜ່ນດິນແຫ່ງພຣະສັນຍາ.
- ຄຽງຄູກັບຕາເລັບ,
  ໂຢຊວຍໄດ້ຮຽກຮ້ອງໃຫ້ປະຊາຊົນເຊື່ອຟັງຄຳສັ່ງຂອງພຣະເຈົ້າທີ່ຈະເຂົ້າໄປໃນແຜ່ນດິນແຫ່ງພຣະສັນຍາແລະເອົາຊະນະຊາວການາອານ.
- ຫລາຍປີຕໍ່ມາຫລັງຈາກໂມເຊເສຍຊີວິດພຣະເຈົ້າໄດ້ແຕ່ງຕັ້ງໂຢຊວຍໃຫ້ນຳຊາວອິດສະຣາເອນເຂົ້າໄປໃນແຜ່ນດິນແຫ່ງພຣະສັນຍາ.
- ໃນສົງຄາມເທື່ອທຳອິດເປັນສົງຄາມທີ່ມີຊື່ສຽງຫລາຍທີ່ສຸດໃນການສູ້ຮົບກັບຊາວການາອານ,
  ໂຢຊວຍໄດ້ນຳພາຊາວອິດສະຣາເອນເອົາຊະນະເມືອງເຢລີໂກ
- ໃນພຣະຄຳພີເດີມພຣະທຳໂຢຊວຍບອກວິທີທີ່ໂຢຊວຍນຳພາອິດສະຣາເອນໃນການຄອບຄອງດິນແດນພຣະສັນຍາໄວ້ແລະວິທີທີ່ລາວມອບໝາຍແຜ່ນດິນ
- ໂຢຊວຍລູກຊາຍຂອງໂຢຊາຢັກໄດ້ຖືກກ່າວເຖິງໃນພຣະຄຳພີຮັກກາຍແລະເສກາຣີຢາ;
  ລາວເປັນປະໂຣຫິດໃຫຍ່ທີ່ຊ່ວຍສ້າງກຳແພງເມືອງເຢຣູຊາເລັມ.
- ມີຜູ້ຊາຍອີກຈຳນວນໜຶ່ງຊື່ວ່າໂຢຊວຍໄດ້ກ່າວເຖິງໃນຕະກູນ ແລະທີ່ອື່ນໆ ໃນພຣະຄຳພີ

## ໂຢຊີຢາ

### ຂໍ້ເທັດຈິງ

ໂຢຊີຢາເປັນກະສັດທີ່ຊອບທຳຜູ້ທີ່ຄອບຄອງອານາຈັກຂອງຢູດາເປັນເວລາສາມສິບເອັດປີ.
ເພິ່ນໄດ້ນຳພາປະຊາຊົນຢູດາໃຫ້ກັບໃຈແລະນະມັດສະການພຣະຢາເວ.

- ຫລັງຈາກພໍ່ຂອງເພິ່ນຄືກະສັດອາໂມນຖືກຂ້າຕາຍ, ໂຢຊີຢາໄດ້ຂຶ້ນເປັນກະສັດປົກຄອງຢູດາເມື່ອອາຍຸເພິ່ນໄດ້ແປດປີ.
- ໃນປີທີ່ສິບແປດຂອງການປົກຄອງຂອງເພິ່ນ,
  ກະສັດໂຢຊີຢາໄດ້ສັ່ງໃຫ້ຮິວຄີຢາຜູ້ເປັນມະຫາປະໂຣຫິດຂຶ້ນສ້າງພຣະວິຫານຂອງພຣະເຈົ້າ. ໃນຂະນະທີ່ກຳລັງເຮັດຢູ່ນັ້ນ,
  ໜັງສືພຣະບັນຍັດໄດ້ຖືກພົບເຫັນ.
- ເມື່ອພຣະທຳພຣະບັນຍັດຕ່າງໆ ໄດ້ຮັບການອ່ານໃຫ້ແກ່ໂຢຊີຢາ,ເພິ່ນໄດ້ໂສກເສົ້າໃນການບໍ່ເຊື່ອຟັງພຣະເຈົ້າຂອງປະຊາຊົນຂອງເພິ່ນ.
  ເພິ່ນໄດ້ສັ່ງໃຫ້ທຳລາຍສະຖານທີ່ບູຊາຮູບເຄົ້າຮົບທັງໝົດແລະໃຫ້ຂ້າປະໂຣຫິດຂອງພະທຽມ
- ເພິ່ນໄດ້ຍັງໄດ້ສັ່ງໃຫ້ປະຊາຊົນເລີ່ມສະເຫລີມສະຫລອງເທດສະການປັດສະກາອີກ.

## ໂຢທາມ

### ຂໍ້ເທັດຈິງ

ໃນພຣະຄຳພີເດີມ, ມີຜູ້ຊາຍສາມຄົນທີ່ວ່າໂຢທາມ

- ໂຢທາມຄົນໜຶ່ງເປັນລູກຊາຍຫຼາຊອງກິເດໂອນ. ໂຢທາມໄດ້ຊ່ວຍເອົາຊະນະອ້າຍຂອງລາວຊື່ອາບີເມເຫຼັກ,
  ຜູ້ໄດ້ຂ້າອ້າຍນ້ອງທັ້ງໝົດຂອງພວກເຂົາ.
- ຜູ້ຊາຍອີກຜູ້ໜຶ່ງທີ່ຊື່ໂຢທາມ ເປັນກະສັດປົກຄອງຢູດາເປັນເວລາສິບຫົກປີຫຼັງຈາກການຕາຍຂອງພໍ່ເພິ່ນຄືອຸດຊີຢາ (ອາຊາຣີຢາ).


generated on Thu Jul 10 08:45:04 2025

- ເຊັ່ນກັບພໍ່ຂອງເພິ່ນ, ກະສັດໂຢທາມໄດ້ເຊື່ອຟັງພຣະເຈົ້າແລະເປັນກະສັດທີ່ດີ.
- ເຖິງຢ່າງໃດກໍ່ຕາມ,ລາວບໍ່ໄດ້ຍົກເລີກສະຖານທີ່ນະມັດສະການຮູບເຄົາຣົບແລະສິ່ງນີ້ໄດ້ເຮັດໃຫ້ປະຊາຊົນຢູດາໃນເວລາຕໍ່ມາຫັນໜີຈາກພຣະເຈົ້າ.
- ໂຢທາມຍັງເປັນໜຶ່ງໃນບັນພະບຸລຸດທີ່ໄດ້ລະບຸໄວ້ໃນເຊື້ອສາຍຂອງພຣະເຢຊູຄຣິດເຈົ້າໃນພຣະທຳມັດທາຍ.

## ໂຢນາ

### ຂໍ້ເທັດຈິງ

ໂຢນາເປັນຜູ້ທຳນວາຍຊາວເຮັບເຣີໃນພຣະຄຳພີເດີມ.

- ພຣະທຳໂຢຮັນເວົ້າເຖິງເລື່ອງທີ່ພຣະເຈົ້າສົ່ງໂຢນາໄປປະກາດໃຫ້ແກ່ປະຊາຊົນໃນເມືອງນີນາເວ.
- ໂຢນາໄດ້ປະຕິເສດທີ່ຈະໄປນີນາເວແລະລົງເຮືອມຸ່ງໜ້າໄປປະເທດໜຶ່ງແທ່ນ.
- ພຣະເຈົ້າຊົງເຮັດໃຫ້ເກີດມີພາຍຸໃຫຍ່ທີ່ແຮງທີ່ສຸດຄອບງຳເຮືອນັ້ນ.
- ເມື່ອພວກຜູ້ຊາຍຢູ່ໃນເຮືອຮູ້ວ່າໂຢຮັນບໍ່ເຊື່ອຟັງພຣະເຈົ້າ ,ພວກເຂົາໄດ້ໂຍນລາວລົງໃນທະເລແລະລົມພາຍຸກໍ່ຢຸດ.
- ໂຢນາຖືກກືນໂດຍປາໃຫຍ່ແລະລາວໄດ້ຢູ່ໃນທ້ອງປາເປັນເວລາສາມວັນສາມຄືນ.
- ຫລັງຈາກນັ້ນ, ໂຢນາໄດ້ໄປທີ່ເມືອງນີນາເວແລະປະກາດກັບປະຊາຊົນແລະພວກເຂົາໄດ້ຫັນໜີຈາກບາບຂອງພວກເຂົາ.

## ໂຢນາທານ

### ຂໍ້ເທັດຈິງ

ໂຢນາທານແມ່ນຊື່ຂອງຜູ້ຊາຍຢ່າງນ້ອຍສິບຄົນໃນພຣະຄຳພີເດີມ. ຊື່ນີ້ໝາຍຄວາມວ່າ “ພຣະຢາເວໄດ້ປະທານ.“

- ໂຢນາທານເປັນເພື່ອນທີ່ດີທີ່ສຸດຂອງດາວິດເປັນຜູ້ຊາຍທີ່ຮູ້ຈັກກັນດີທີ່ສຸດໃນພຣະຄຳພີໄບເບິນໃນຊື່ນີ້.
  ໂຢນາທານເປັນລູກຊາຍກົກຂອງກະສັດໂຊນ.
- ໂຢນາທານຄົນອື່ນໆທີ່ກ່າວເຖິງໃນພຣະຄຳພີເດີມລວມມີ: ເຊື້ອສາຍຂອງໂມເຊ; ຫລານຊາຍຂອງກະສັດດາວິດ;
  ປະໂຣຫິດຈຳນວນໜຶ່ງ, ໃນນັ້ນມີລູກຊາຍຂອງອາບີຢາທາ;
  ແລະນັກຂຽນໃນພຣະຄຳພີເດີມຢູ່ໃນເຮືອນຂອງເຂົາຜູ້ທຳນວາຍເຢເຣມີຢາໄດ້ຖືກຂັງຄຸກ.

## ໂຢບ

### ຂໍ້ເທັດຈິງ

ໂຢບແມ່ນຜູ້ຊາຍທີ່ຖືກອະທິບາຍໃນພຣະຄຳພີວ່າເປັນຄົນທີ່ບໍ່ມີຄວາມຜິດແລະຊອບທຳຕໍ່ໜ້າພຣະເຈົ້າ.
ລາວມີຊື່ສຽງດີທີ່ສຸດສຳລັບຄວາມອົດທົນໃນຄວາມເຊື່ອຂອງລາວໃນພຣະເຈົ້າຕະຫລອດເວລາທີ່ມີຄວາມທຸກທໍລະມານ.

- ໂຢບອາໄສຢູ່ໃນແຜ່ນດິນອູ, ຊຶ່ງຕັ້ງຢູ່ທາງທິດຕາເວັນອອກຂອງແຜ່ນດິນການາອານ, ອາດຈະຢູ່ໃກ້ກັບເຂດຂອງຊາວເອໂດມ.
- ຄິດກັນວ່າລາວມີຊີວິດຢູ່ໃນຊ່ວງເວລາຂອງເອຊາວແລະຢາໂຄບເພາະວ່າເພື່ອນຄົນໜຶ່ງຂອງໂຢບເປັນຄົນ “ເທມານາຍ,“
  ຊຶ່ງເປັນກຸ່ມຄົນທີ່ມາຈາກເຊື້ອສາຍຫລານຊາຍຂອງເອຊາວ.
- ໃນພຣະຄຳພີເດີມພຣະທຳໂຢບໄດ້ບອກກ່ຽວກັບວິທີທີ່ໂຢບແລະຄົນອື່ນໆຕອບສະໜອງຕໍ່ຄວາມທຸກທໍລະມານຂອງລາວ.ແລະຍັງໃຫ້ທັດສະນະຂອງພຣະ
- ຫລັງຈາກໄພພິບັດທັງໝົດ,ພຣະເຈົ້າຊົງຮັກສາໂຢບແລະປະທານລູກແລະຄວາມຮັ່ງມີເພີ່ມຂຶ້ນອີກ.
- ພຣະທຳໂຢບບອກວ່າລາວເຖົ້າຫລາຍເມື່ອລາວຕາຍ.

## ໂຢທາມ

### ຂໍ້ເທັດຈິງ

ໂຢທາມເປັນລູກຊາຍຂອງກະສັດອາຮາຍແຫ່ງອິດສະຣາເອນ. ໃນບາງຄັ້ງລາວຖືກເອີ້ນໃນຊື່ “ເຢໂຮທາມ.“

- ກະສັດໂຢທາມແຫ່ງອິດສະຣາເອນໄດ້ປົກຄອງໃນເວລາດຽວກັນກັບກະສັດເຢໂຮທາມແຫ່ງຢູດາ.
- ໂຢທາມເປັນກະສັດທີ່ຊົ່ວຮ້າຍທີ່ໄດ້ນະມັດສະການພະຫຽມແລະນຳອິດສະຣາເອນໃຫ້ເຮັດບາບ.
- ກະສັດໂຢທາມແຫ່ງອິດສະຣາເອນໄດ້ຄອບຄອງໃນໄລຍະເວລາຂອງຜູ້ທຳນວາຍເອລີຢາແລະໂອບາດີຢາ.
- ມີຜູ້ຊາຍອີກຄົນໜຶ່ງຊື່ໂຢທາມ ເປັນລູກຊາຍຂອງກະສັດກູແຫ່ງຮາມາດໃນຊ່ວງທີ່ດາວິດເປັນກະສັດ.


generated on Thu Jul 10 08:45:04 2025

## ໂຢອາດ

### ຂໍ້ເທັດຈິງ

ໂຢອາດແມ່ນຊື່ຂອງຜູ້ຊາຍຫລາຍຄົນໃນພຣະຄຳພີເດີມ

- ໂຢອາດອີກຜູ້ໜຶ່ງເປັນພໍ່ຂອງຜູ້ປົດປ່ອຍຊາວອິດສະຣາເອນຄື, ກິເດໂອນ.
- ຜູ້ຊາຍອີກຄົນໜຶ່ງທີ່ຊື່ໂຢອາດເປັນເຊື້ອສາຍຂອງລູກຊາຍຫຼ້າຢາໂຄບຄື, ເບັນຢາມິນ.
- ໂຢອາດທີ່ມີຊື່ສຽງຫຼາຍທີ່ສຸດເພິ່ນໄດ້ກາຍເປັນກະສັດຂອງຢູດາເມື່ອອາຍຸໄດ້ເຈັດປີ.
  ເພິ່ນເປັນລູກຊາຍຂອງອາຮາຊີຢາກະສັດແຫ່ງຢູດາ, ຜູ້ທີ່ຖືກຄາດຕະກຳ.
- ໃນເວລາທີ່ໂຢອາດເປັນເດັກນ້ອຍ,
  ປ້າຂອງເພິ່ນໄດ້ຊ່ວຍເພິ່ນຈາກການຖືກຂ້າໂດຍການປິດບັງເພິ່ນໄວ້ຈົນກວ່າເພິ່ນມີອາຍຸພຽງພໍທີ່ຈະໄດ້ຮັບຕຳແໜ່ງກະສັດ.
- ກະສັດໂຢອາດເປັນກະສັດທີ່ດີເຊິ່ງທຳອິດໄດ້ເຊື່ອຟັງພຣະເຈົ້າ. ແຕ່ລາວບໍ່ໄດ້ຍົກຍ້າຍບ່ອນທີ່ຂາບໄຫວ້ຂອງຄົນຕ່າງຊາດ ແລະ
  ຊາວອິດສະຣາເອນກໍເລີ່ມນະມັດສະການຮູບເຄົາລົບອີກ.
- ກະສັດໂຢອາດໄດ້ປົກຄອງຢູດາໃນຊ່ວງເວລາບາງປີທີ່ກະສັດເຢໂຮອາດໄດ້ປົກຄອງອິດສະຣາເອນ.
  ພວກເພິ່ນທັ້ງສອງແມ່ນກະສັດຄົນລະອົງ.

## ໂຢອາບ

### ຂໍ້ເທັດຈິງ

ໂຢອາບແມ່ນຫົວໜ້າທະຫານທີ່ສຳຄັນສຳຫລັບກະສັດດາວິດຕະຫຼອດການປົກຄອງທັ້ງໝົດ.

- ກ່ອນທີ່ດາວິດຈະຂຶ້ນເປັນກະສັດ, ໂຢອາບກໍເປັນຜູ້ຕິດຕາມທີ່ສັດຊື່ຂອງພຣະອົງແລ້ວ.
- ຕໍ່ມາໃນລະຫວ່າງທີ່ກະສັດດາວິດປົກຄອງປະເທດອິດສະຣາເອນ, ໂຢອາບກາຍເປັນຜູ້ບັນຊາການກອງທັບຂອງກະສັດດາວິດ.
- ໂຢອາບກໍເປັນຫຼານຊາຍຂອງກະສັດດາວິດຍ້ອນວ່າແມ່ຂອງໂຢອາບເປັນນ້ອງສາວອີກຜູ້ໜຶ່ງຂອງກະສັດດາວິດ.
- ເມື່ອອັບຊາໂລມລູກຊາຍຂອງກະສັດດາວິດໄດ້ທໍລະຍົດຕໍ່ເພິ່ນໂດຍພະຍາຍາມເຂົ້າຄອບຄອງຄວາມເປັນກະສັດ,
  ໂຢອາບໄດ້ຂ້າອັບຊາໂລມເພື່ອປົກປ້ອງກະສັດ.
- ໂຢອາບເປັນນັກຮົບທີ່ຮຸນແຮງຫຼາຍແລະໄດ້ຂ້າຫຼາຍຄົນທີ່ເປັນສັດຕູຂອງອິດສະຣາເອນ.

## ໂຢຮັນ ( ອັກຄະສາວົກ )

### ຂໍ້ເທັດຈິງ

ໂຢຮັນເປັນໜຶ່ງໃນອັກຄະສາວົກສິບສອງຄົນຂອງພຣະເຢຊູແລະເປັນສະຫາຍທີ່ໃກ້ຊິດທີ່ສຸດຂອງພຣະເຢຊູ.

- ໂຢຮັນແລະນ້ອງຊາຍຂອງລາວຊື່ຢາໂກໂບເປັນລູກຊາຍຂອງຊາວປະມົງຊື່ເຊເບດາຍ.
- ໃນຂ່າວປະເສີດທີ່ລາວໄດ້ຂຽນກ່ຽວກັບຊີວິດຂອງພຣະເຢຊູ,ໂຢຮັນໄດ້ກ່າວເຖິງຕົນເອງວ່າ “ສາວົກທີ່ພຣະເຢຊູຊົ່ງຮັກ.“
  ນີ້ເບິ່ງຄືວ່າຈະແສດງໃຫ້ເຫັນວ່າໂຢຮັນເປັນສະຫາຍສະໜິດທີ່ສຸດຂອງພຣະເຢຊູ.
- ອັກຄະສາວົກໂຢຮັນໄດ້ຂຽນພຣະທຳຫ້າເຫລັ້ມໃນພຣະຄຳໃໝ່ຄື: ພຣະທຳຂ່າວປະເສີດຂອງໂຢຮັນ,
  ພຣະທຳພຣະນິມິດຂອງພຣະເຢຊູຄຣິດເຈົ້າ, ແລະຈົດໝາຍສາມສະບັບທີ່ຂຽນເຖິງຜູ້ເຊື່ອຄົນອື່ນໆ.
- ໃຫ້ສັງເກດວ່າອັກຄະສາວົກໂຢຮັນເປັນຄົນລະຄົນກັນກັບໂຢຮັນບັບຕິສະໂຕ.

## ໂຢຮັນ ມາຣະໂກ

### ຂໍ້ເທັດຈິງ

ໂຢຮັນມາຣະໂກ, ເຊິ່ງເອີ້ນກັນວ່າ “ມາຣະໂກ “ ເປັນໜຶ່ງໃນບັນດາຜູ້ທີ່ເດີນທາງໄປກັບໂປໂລໃນການເດີນທາງໄປສອນສາສະໜາ.
ສ່ວນຫລາຍຈະເປັນຜູ້ຂຽນພຣະກິດຕິຄຸນມາຣະໂກ.

- ໂຢຮັນມາຣະໂກໄດ້ໄປນຳພີ່ນ້ອງຂອງລາວຊື່ບາຣະນາບາແລະໂປໂລໃນການເດີນທາງໄປສອນສາສະໜາຄັ້ງທຳອິດ.
- ໃນເວລາທີ່ເປໂຕໄດ້ຖືກຂັງຢູ່ໃນນະຄອນເຢຣູຊາເລັມ, ຜູ້ທີ່ເຊື່ອຢູ່ທີ່ນັ້ນໄດ້ອະທິຖານເພື່ອລາວຢູ່ເຮືອນແມ່ຂອງໂຢຮັນມາຣະໂກ.
- ມາຣະໂກບໍ່ແມ່ນອັກຄະສາວົກດ້ັງເດີມ, ແຕ່ທັ້ງໂປໂລແລະເປໂຕໄດ້ສອນລາວ ແລະໄດ້ເຮັດວຽກຮ່ວມກັບພວກເຂົາໃນວຽກຮັບໃຊ້


generated on Thu Jul 10 08:45:04 2025

## ໂຢຮັນ( ຜູ້ໃຫ້ບັບຕິສະໂຕ )

### ຂໍ້ເທັດຈິງ

ໂຢຮັນເປັນລູກຊາຍຂອງເຊກາຣີຢາແລະເອລີຊາເບັດ, ເນື່ອງຈາກຊື “ໂຢຮັນ“ເປັນຊື່ທຳມະດາລາວມັກຈະຖືກເອີ້ນວ່າ
“ໂຢຮັນບັບຕິສະໂຕເພື່ອຈຳແນກລາວຈາກຄົນອື່ນໆທີ່ມີຊື່ວ່າໂຢຮັນເຊັ່ນ, ອັກຄະສາວົກໂຢຮັນ.

- ໂຢຮັນເປັນຜູ້ທຳນວາຍທີ່ພຣະເຈົ້າໄດ້ສົ່ງມາເພື່ອກະກຽມຜູ້ຄົນໃຫ້ເຊື່ອແລະຕິດຕາມພຣະເມຊີອາ.
- ໂຢຮັນໄດ້ບອກໃຫ້ປະຊາຊົນສາລະພາບຂອງພວກເຂົາ, ແລະຫັນມາຫາພຣະເຈົ້າ,ແລະຢຸດເຮັດບາບ,
  ເພື່ອພວກເຂົາຈະພ້ອມທີ່ຈະຕ້ອນຮັບພຣະເມຊີອາ.
- ໂຢຮັນໄດ້ໃຫ້ບັບຕິສະມາຫລາຍຄົນໃນນ້ຳເພື່ອເປັນສັນຍາລັກວ່າພວກເຂົາຂໍອະໄພສຳລັບບາບຂອງພວກເຂົາແລະຫັນໜີຈາກບາບເຫລົ່ານັ້ນ.
- ໂຢຮັນຖືກເອີ້ນວ່າ “ໂຢຮັນຜູ້ໃຫ້ບັບຕິສະມາ“ ເພາະວ່າລາວໄດ້ໃຫ້ບັບຕິສະມາແກ່ຫລາຍຄົນ.
- ເພື່ອໃຫ້ແນ່ໃຈວ່າປະຊາຊົນຈະເຂົ້າໃຈວ່າ “ຜູ້ໃຫ້ບັບຕິສະມາ”ບໍ່ໄດ້ອ້າງເຖິງຄຣິສະຕະຈັກໂດຍຊື່ນີ້. ສະນັ້ນຈຶ່ງຈຳເປັນທີ່ຈະເວົ້າຊື່ວ່າ,
  “ໂຢຮັນບັບຕິສະໂຕ“ ຫລື “ໂຢຮັນຜູ້ໃຫ້ບັບຕິສະມາ“

## ໂຢເຊັບ

### ຂໍ້ເທັດຈິງ

ໂຢເຊັບເປັນພໍ່ໃນໂລກນີ້ຂອງພຣະເຢຊູແລະໄດ້ຮັບລ້ຽງພຣະເຢຊູໃນຖານະລູກຊາຍຄົນໜຶ່ງ. ລາວເປັນຄົນຊອບທຳທີ່ເຮັດວຽກເປັນຊ່າງໄມ້.

- ໂຢເຊັບໄດ້ໝັ້ນກັບຍິງສາວຊາວຢິວຊື່ວ່າມາຣີ, ເຊິ່ງພຣະເຈົ້າໄດ້ເລືອກໃຫ້ເປັນແມ່ຂອງພຣະເຢຊູຜູ້ເປັນພຣະເມຊີອາ.
- ທູດສະຫວັນອົງບອກໂຢເຊັບວ່າພຣະວິນຍານບໍຣິສຸດໄດ້ເຮັດການອັດສະຈັນດ້ວຍການເຮັດໃຫ້ນາງມາຣີຖືພາ,
  ແລະລູກຂອງມາຣີເປັນພຣະບຸດຂອງພຣະເຈົ້າ.
- ຫລັງຈາກພຣະເຢຊູເກີດແລ້ວ,
  ທູດສະຫວັນອົງໜຶ່ງໄດ້ເຕືອນໂຢເຊັບໃຫ້ພາເດັກນ້ອຍແລະມາໄປປະເທດເອຢິບເພື່ອທີ່ຈະໜີຈາກເຮໂຣດ.
- ໂຢເຊັບແລະຄອບຄົວຂອງລາວອາໄສຢູ່ໃນເມືອງນາຊາເຣັດແຂວງຄາລີເລທີ່ລາວຫາລ້ຽງຊີບໂດຍການເປັນຊ່າງໄມ້.

## ໂຢເຊັບ (ໃນພຣະຄຳພີເດີມ)

### ຂໍ້ເທັດຈິງ

ໂຢເຊັບເປັນລູກຊາຍຄົນທີ່ສິບເອັດຂອງຢາໂຄບແລະເປັນລູກຊາຍຄົນທຳອິດຂອງຣາເຊັນຜູ້ເປັນແມ່ຂອງລາວ.

- ໂຢເຊັບເປັນລູກຊາຍທີ່ຜໍຣັກຫລາຍ.
- ພວກອ້າຍຂອງລາວອິດສາລາວ ແລະໄດ້ຂາຍລາວໃຫ້ໄປເປັນທາດຮັບໃຊ້
- ໃນຂະນະຢູ່ໃນປະເທດເອຢິບ, ໂຢເຊັບຖືກກ່າວຫາປອມໆແລະຖືກຂັງຄຸກ.
- ເຖິງວ່າຈະມີຄວາມຫຍຸ້ງຍາກ, ໂຢເຊັບຍັງຄົງຊື່ສັດຕໍ່ພຣະເຈົ້າ.
- ພຣະເຈົ້າໄດ້ນຳລາວໃຫ້ມີຕຳແໜ່ງສູງທີ່ສຸດອັນດັບສອງໃນປະເທດເອຢິບແລະໃຊ້ລາວເພື່ອຊ່ວຍປະຊາຊົນໃນເວລາທີ່ມີອາຫານໜ້ອຍ.
  ປະຊາຊົນຊາວເອຢິບ, ແລະຄອບຄົວຂອງລາວ, ໄດ້ຮັບການຊ່ວຍໃຫ້ພົ້ນຈາກຄວາມອຶດຫິວ.

## ໂຢເອນ

### ຂໍ້ເທັດຈິງ

ໂຢເອນແມ່ນຊື່ຂອງຜູ້ທຳນວາຍຜູ້ທີ່ອາດຈະມີຊີວິດຢູ່ໃນໄລຍະການປົກຄອງຂອງກະສັດໂຢອາດແຫ່ງຢູດາ.
ຍັງມີຜູ້ຊາຍຫລາຍຄົນຢູ່ໃນພຣະຄຳພີເດີມທີ່ມີຊື່ວ່າໂຢເອນ.

- ພຣະທຳໂຢເອນແມ່ນພຣະທຳທີ່ສັ້ນຫົວໜຶ່ງໃນສິບສອງຫົວຂອງຜູ້ທຳນວາຍໃນພາກພຣະຄຳພີເດີມ.
- ຂໍ້ມູນສ່ວນຕົວເທົ່ານັ້ນທີ່ພວກເຮົາມີກ່ຽວກັບຜູ້ທຳນວາຍໂຢເອນຄືພໍ່ຂອງລາວຊື່ວ່າ ເປທູເອນ.
- ໃນຄຳເທດສະໜາຂອງວັນເພັນເຕຄໍສະເຕ, ອັກຄະສາວົກເປໂຕໄດ້ອ້າງອີງຈາກພຣະໂຢເອນ.


generated on Thu Jul 10 08:45:04 2025

## ໂຣມ, ໂຣມັນ

### ຂໍ້ເທັດຈິງ

ໃນສະໄໝພຣະຄໍາພີໃໝ່, ເມືອງໂຣມເປັນສູນກາງຂອງຈັກ ກະພັດໂຣມັນ. ດຽວນີ້ມັນເປັນເມືອງຫລວງຂອງປະເທດອິຕາລີທີ່ທັນສະ ໄໝ.

- ຈັກກະພັດໂຣມັນໄດ້ປົກຄອງທຸກຂົງເຂດອ້ອມແອ້ມທະເລເມດິເຕຣາເນ, ຮ່ວມທັງອິສະຣາເອນ.
- ຄໍາວ່າ "ໂຣມັນ" ໝາຍ ເຖິງສິ່ງໃດໜຶ່ງທີ່ກ່ຽວຂ້ອງກັບຂົງເຂດຕ່າງໆທີ່ຣັຖະບານໃນນະຄອນໂຣມຄວບຄຸມລວມທັງຜົນ ລະ ເມືອງແລະເຈົ້າໜ້າທີ່ໂຣມັນ.
- ອັກຄະສາວົກໂປໂລຖືກພາໄປເມືອງໂຣມໃນຖານະເປັນນັກໂທດເພາະລາວປະກາດຂ່າວດີກ່ຽວກັບພຣະເຢຊູ.
- ປຶ້ມພຣະຄໍາພີ ໃໝ່ຂອງ "ໂຣມ" ແມ່ນຈົດໝາຍທີ່ໂປໂລຂຽນເຖິງຄຣິສະຕຽນໃນເມືອງໂຣມ.

## ໂລກ, ວິທີທາງຂອງໂລກ

### ນິຍາມ

ຄໍາວ່າ "ໂລກ" ໂດຍປົກກະຕິໝາຍເຖິງສ່ວນໜຶ່ງຂອງຈັກກະວານທີ່ຜູ້ຄົນອາໃສຢູ່: ແຜ່ນດິນໂລກ. ຄໍາວ່າ "ວິທີທາງຂອງໂລກ" ອະທິບາຍເຖິງຄວາມນິຍົມແລະພຶດຕິກໍາທີ່ຊົ່ວຮ້າຍຂອງຜູ້ຄົນທີ່ອາໃສຢູ່ໃນໂລກນີ້.

- ໃນສ່ວງຫ້ວໄປທີ່ສຸດ ຄໍາວ່າ "ໂລກ" ໝາຍເຖິງ ຟ້າສະຫວັນແລະແຜ່ນດິນໂລກຕະຫຼອດຈົນທຸກສິ່ງທຸກຢ່າງທີ່ຢູ່ໃນໂລກນັ້ນ.
- ໃນບາງກໍລະນີ "ໂລກ" ໝາຍເຖິງ "ຜູ້ຄົນທີ່ຢູ່ໃນໂລກ."
- ບາງຄັ້ງກໍເປັນເນື້ອໃນທີ່ວ່າຄໍານີ້ໝາຍເຖິງຄົນຊົ່ວຮ້າຍທີ່ຢູ່ໃນແຜ່ນ ດິນໂລກຫຼືຄົນທີ່ບໍ່ເຊື່ອຟັງພຣະເຈົ້າ.
- ພວກອັກຄະສາວົກໄດ້ໃຊ້ "ໂລກ" ເພື່ອໝາຍເຖິງພຶດຕິກໍາທີ່ເຫັນແກ່ຕົວແລະຄຸນຄ່າທີ່ສຸດຈະຣິດຂອງຜູ້ຄົນທີ່ອາໃສຢູ່ໃນໂລກນີ້ຮວມເຖິງການປະຕິບັດທາງສາດສະໜາທີ່ໃຫ້ຕົນເອງຊອບ ທໍາຂຶ້ນຢູ່ກັບຄວາມພະຍາ ຍາມຂອງມະນຸດ.
- ຜູ້ຄົນແລະສິ່ງຕ່າງໆ ທີ່ຈັດເປັນປະເພດໃຫ້ມີຄຸນຄ່າເຫຼົ່ານີ້ທີ່ກ່າວກັນວ່າເປັນ "ວິທີທາງຂອງໂລກ. "

### ຄໍາແນະນໍາໃນການແປ:

- ຂຶ້ນຢູ່ກັບກໍລະນີ "ໂລກ" ໝາຍເຖິງ "ຈັກກະວານ" ຫລື "ຄົນຢູ່ໃນໂລກນີ້" ຫລື "ສິ່ງຊົ່ວຮ້າຍຢູ່ໃນໂລກ" ຫລື "ແນວຄິດທີ່ຊົ່ວຮ້າຍຂອງຜູ້ຄົນຢູ່ໃນໂລກ."
- ຄໍາວ່າ "ທົ່ວທັ້ງໂລກ" ນັ້ນໝາຍເຖິງ "ຄົນຈໍານວນຫລາຍ" ແລະໝາຍເຖິງຄົນທີ່ອາໃສຢູ່ໃນຜືນແຜ່ນດິນໂລກໂດຍສະເພາະ. ຍົກຕົວຢ່າງເຊັ່ນ "ຄົນທົ່ວທັ້ງໂລກມາຍັງອີຢິບ" ມີຄໍາແປໄດ້ອີກວ່າ "ຫລາຍຄົນຈາກປະ ເທດໂດຍອ້ອມຂ້າງປະເທດອີຢິບ" ຫລື "ຄົນຈາກທຸກໆປະເທດເພື່ອນປະເທດອີຢິບ."
- ອີກວິທີໜຶ່ງໃນການແປ "ທົ່ວທັ້ງໂລກກໍໄດ້ກັບໄປຢ້ານເກີດຂອງພວກເຂົາເພື່ອລົງທະບຽນໃນສໍາມະໂນຄົວປະຊາຊົນໂຣມັນ" ຈະເປັນ "ຫລາຍຄົນທີ່ອາໃສຢູ່ໃນດິນແດນທີ່ປົກຄອງໂດຍຈັກກະພັດໂຣມັນໄດ້ໄປ... "
- ຂຶ້ນຢູ່ກັບກໍລະນີນັ້ນໆ ຄໍາວ່າ "ວິທີທາງຂອງໂລກ" ອາດຈະໝາຍຄວາມວ່າ "ຊົ່ວ" ຫລື "ບາບ" ຫລື "ເຫັນແກ່ຕົວ" ຫລື "ອະທໍາ" ຫລື "ສຸດຈະຣິດ" ຫລື "ໄດ້ຮັບອິດທິພົນຈາກຄວາມເສື່ອມຊາມຂອງມະນຸດໃນໂລກນີ້."
- "ເວົ້າສິ່ງນີ້ໃນໂລກ" ອາດຈະແປໄດ້ວ່າ "ເວົ້າສິ່ງນີ້ຕໍ່ຄົນທີ່ຢູ່ໃນໂລກ."
- ໃນກໍລະນີອື່ນໆ "ໃນໂລກ" ມີຄໍາແປໄດ້ອີກວ່າ "ດໍາເນີນຊີວິດທ່າມ ກາງປະຊາຊົນຢູ່ໃນໂລກ" ຫລື "ດໍາເນີນຊີວິດທ່າມກາງຂອງຄົນອະທໍາ."

## ໂລກ, ກ່ຽວກັບໂລກ

### ນິຍາມ

ຄໍາວ່າ "ໂລກ" ເວົ້າເຖິງໂລກທີ່ມະນຸດອາໃສຢູ່, ຕະຫລອດທັ້ງສິ່ງທີ່ມີຊີວິດທຸກຊະນິດ.

- "ໂລກ" ສາມາດເວົ້າເຖິງຜືນດິນຫລືດິນທີ່ປົກຄຸມແຜ່ນດິນ.
- ຄໍານີ້ມັກໃຊ້ໃນການປຽບທຽບເພື່ອອ້າງເຖິງຄົນທີ່ອາໃສຢູ່ໃນແຜ່ນດິນ.
- ຄໍາກ່າວທີ່ວ່າ, "ໃຫ້ແຜ່ນດິນໂລກຍິນດີ" ແລະ "ພຣະອົງຈະຊົງພິພາກສາໂລກ" ເປັນຕົວຢ່າງຂອງການໃຊ້ທໍານອງປຽບທຽບຂອງຄໍາສັບນີ.
- ຄໍາວ່າ "ກ່ຽວກັບໂລກ" ມັກເວົ້າເຖິງສິ່ງທີ່ເປັນທາງຮ່າງກາຍທີ່ກົງກັນຂ້າມກັບບັນດາສິ່ງທີ່ເປັນທາງຈິດວິນຍານ.


generated on Thu Jul 10 08:45:04 2025

### ຄຳແນະນຳໃນການແປ

- ຄຳນີ້ສາມາດແປໂດຍເປັນຄຳຫລືເປັນຫ້ອຍຄຳໃນພາສາທ້ອງຖິ່ນຫລືພາສາກາງທີ່ໃກ້ຄຽງ ໃຊ້ເພື່ອອ້າງເຖິງໂລກທີ່ເຮົາອາໄສຢູ່.
- "earth" ອາດຈະແປວ່າ "ໂລກ" ຫລື "ແຜ່ນດິນ" ຫລື "ສິ່ງເປັະເປືອນ" ຫລື "ດິນ." ທັ້ງນີ້ເພື່ອໃຫ້ຂຶ້ນກັບຄວາມໝາຍນັ້ນໆ
- ເມື່ອໃຊ້ໃນການປຽບທຽບ, "earth" ອາດຈະແປວ່າ, "ຄົນເທິງແຜ່ນດິນໂລກ" ຫລື "ຜູ້ຄົນທີ່ອາໄສຢູ່ເທິງແຜ່ນດິນໂລກ" ຫລື "ທຸກຢ່າງເທິງແຜ່ນ ດິນໂລກ."
- ວິທີການແປ "ກ່ຽວກັບໂລກ" ອາດຈະລວມເຖິງ, "ທາງຮ່າງກາຍ" ຫລື "ສິ່ງຕ່າງໆຂອງແຜ່ນດິນນີ້" ຫລື "ສິ່ງທີ່ເບິ່ງເຫັນໄດ້."

## ໂລກຂີ້ທູດ, ຄົນຂີ້ທູດ, ຂີ້ທູດ

### ນິຍາມ

ຄຳວ່າ " ໂລກຂີ້ທູດ " ເປັນຄຳທີ່ຖືກໃຊ້ໃນພຣະຄຳພີອ້າງອີງເຖິງໂລກຜິວໜັງຫລາຍປະເພດ " ຜູ້ປ່ວຍໂລກຂີ້ທູດ " ຄືບຸກຄົນທີ່ປ່ວຍເປັນຂີ້ທູດ ຄຳວ່າ " ເປັນລູກຂີ້ທູດ " ອະທິບາຍເຖິງບຸກຄົນຫລືສ່ວນຮ່າງກາຍທີ່ຕິດເຊື້ອໂລກຂີ້ທູດ .

- ປະເພດຂອງໂລກຂີ້ທູດເປັນເຫດໃຫ້ຜິວໜັງກາຍເປັນບໍ່ມີສີ ແລະ ມີຮອຍດ່າງສີຂາວ ຄືກັບມີລຽມ ແລະ ບາອາມານປ່ວຍເປັນໂລກຂີ້ທູດ.
- ໃນສະໄໜໃໝ່ໂລກຂີ້ທູດມັກຈະເຮັດໃຫ້ມື ຕີນ ແລະສ່ວນອື່ນໆຂອງຮ່າງກາຍຖືກທຳລາຍ ແລະ ພິການ.
- ຕາມທີ່ມີຄຳແນະນຳວ່າພຣະເຈົ້າ ປະທານໃຫ້ພວກອິດສເອວ ເມື່ອບຸກຄົນປ່ວຍເປັນໂລກຂີ້ທູດເຂົາຈະຖືກພິຈາລະນາ " ບໍ່ສະອາດ " ແລະຈະຕ້ອງໄດ້ໄປຢູ່ໄກຈາກປະຊາຊົນຄົນອື່ນໆ ເພື່ອທີ່ພວກເຂົາຈະບໍ່ຕິດເຊື້ອໂລກ.
- ຜູ້ປ່ວຍໂລກຂີ້ທູດຈະຮ້ອງດັ່ງວ່າ " ບໍ່ສະອາດ " ເພື່ອທີ່ຄົນອື່ນຈະໄດ້ຮັບການເຕືອນບໍ່ໃຫ້ເຂົ້າໃກ້ເຂົາ.
- ພຣະເຢຊູຊົງປິ່ນປົວຮັກສາຜູ້ປ່ວຍເປັນໂລກຂີ້ທູດຫລາຍຄົນເຊັ່ນດຽວກັບໂລກຊະນິດອື່ນໆ.

### ຄຳແນະນຳໃນການແປ

- ຄຳວ່າ " ໂລກຂີ້ທູດ " ໃນພຣະຄຳພີສາມາດແປວ່າ " ໂລກຜິວໜັງ " ຫລື " 3ໂລກຜິວໜັງທີ່ເປັນຕາຢ້ານ. "
- ວິທີການແປຄຳວ່າ " ເປັນໂລກຂີ້ທູດ " ສາມາດລວບລວມຄຳວ່າ " ເຕັ້ມໄປດ້ວຍໂລກຂີ້ທູດ " ຫລື " ຕິດໂລກທາງຜິວໜັງ " ຫລື " ເຕັ້ມໄປດ້ວຍບາດແຜທີ່ຜິວໜັງ "

## ໂລທ

### ຂ້ເທັດຈິງ

ໂລທເປັນຊື່ຂອງຫຼານຊາຍຂອງອັບຣາຮາມ

- ເຂົາເປັນລູກຊາຍຂອງອ້າຍຂອງອັບຣາຮາມທີ່ມີຊື່ວ່າຮາຣັນ
- ໂລທໄດ້ເດີນທາງໄປກັບອັບຣາຮາມເພື່ອໄປຍັງດິນແດນຄານາອິນ ແລະ ຕັ້ງເຮືອນຢູ່ໃນເມືອງໂຊໂດມ
- ໂລທສືບເຊື້ອສາຍມາຈາກຊາວໂມອັບ ແລະ ອັມໂມນ
- ເມື່ອກະສັກທີ່ເປັນສັດຕູ ໄດ້ໂຈມຕີເມືອງໂຊໂດມ ແລະ ໄດ້ຈັບໂລທ ອັບຣາຮາມໄດ້ມາພ້ອມກັບຊາຍຫຼາຍຮ້ອຍຄົນເພື່ອຊ່ວຍ ໂລທ ແລະ ເອົາສິ່ງຂອງຂອງເຂົາຄືນມາ
- ຜູ້ຄົນທີ່ອາໄສຢູ່ໃນເມືອງໂຊໂດມໄດ້ອ່ອນເພຍກຳລັງຫຼາຍ ດັ່ງນັ້ນພຣະເຈົ້າຈຶ່ງໄດ້ຊົງທຳລາຍນເມືອງນັ້ນ ແຕ່ພຣະອັງຊົງໄດ້ບອກໂລທ ແລະ ຄອບຄົວຂອງເຂົາກ່ອນເພື່ອໃຫ້ພວກເຂົາໜີອອກຈາກເມືອງນັ້ນ

## ໂລ່

### ນິຍາມ

ໂລ່ເປັນວັດຖຸຢ່າງໜຶ່ງທີ່ທະຫານໃຊ້ຖືໃນການສູ້ຮົບເພື່ອປ້ອງກັນຕົວເຂົາບໍ່ໃຫ້ໄດ້ຮັບບາດເຈັບຈາກອາວຸດຂອງສັດຕູ. "ການປົກປ້ອງ" ໃຜຄົນໜຶ່ງໝາຍເຖິງການປ້ອງກັນເຂົາຄົນນັ້ນຈາກອັນຕະລາຍ.

- ໂລ່ເປັນຮູບຊົງກົມຫລືຮູບວົງລີເຮັດດ້ວຍວັດສະດຸ ເຊັ່ນໜັງສັດ, ໄມ້, ຫລື ໂລຫະ ໝາຜໍ່ທີ່ຈະປ້ອງກັນດາບແລະລູກທະນູໄດ້.
- ການໃຊ້ຄຳນີ້ເປັນຄຳອຸປະມາ ພຣະຄຳພີອ້າງເຖິງພຣະເຈົ້າໃນຖານະໂລ່ປົກປ້ອງປະຊາຊົນຂອງພຣະອົງ.
- ໂປໂລໄດ້ເວົ້າເຖິງ "ໂລ່ແຫ່ງຄວາມເຊື່ອ," ດ້ວຍ ເຊິ່ງເປັນວິທີການປຽບທຽບກັບຄວາມເຊື່ອໃນພຣະເຢຊູ, ແລະການດຳເນີນຊີວິດໃນຄວາມເຊື່ອແຫ່ງຄວາມຢຳເກງ, ພຣະເຈົ້າຈະປົກປ້ອງຜູ້ເຊື່ອຈາກການໂຈມຕີດ້ານຈິດວິນຍານຂອງມານຊາຕານ.


generated on Thu Jul 10 08:45:04 2025

## ໂສເພນີ, ຄ້າມະນຸດ, ເພດ,ຍິງແພດສະຍາ,ຍິງຂາຍບໍຣິການທາງເພດ

### ນິຍາມ

ຄຳວ່າ "ໂສເພນີ" ແລະ "ຊາວແພດສະຍາ" ອ້າງເຖິງບຸກຄົນທີ່ປະກອບການທາງເພດເພື່ອເງິນຫລືເພື່ອພິທີກຳທາງສາດສະໜາ
ໂສເພນີຫລືຊາວແພດສະຍາມັກຈະເປັນເພດຍິງ ແຕ່ບາງຄົນກໍເປັນເພດຊາຍ

- ໃນພະຄັມພີ ຄຳວ່າ "ໂສເພນີ"
  ບາງເທື່ອໃຊ້ເປັນຄຳອຸບປະມາອຸບປະມັຍອ້າງເຖິງບຸກຄົນທີ່ນະມັດສະການພະທຽມເທັດຫລືຜູ້ກະທຳເວດມົນຄາຖາ
- ສຳນວນທີ່ວ່າ "ຫລິ້ນຍິງແພດສະຍາ" ໝາຍເຖິງການກະທຳທີ່ເໝືອນຍິງແພດສະຍາໂດຍການເຮັດຜິດສິນລະທຳທາງເພດ
  ສຳນວນນີ້ໃນພະຄັມພີຍັງໃຊ້ເພື່ອປຽບເຖິງຄົນທີ່ນະມັດສະການຮູບເຄົ້າລົບ
- "ເປັນໂສເພນີ" ກັບບາງສິ່ງໝາຍເຖິງການເຮັດຜິດສິນລະທຳທາງເພດ ຫລື
  ເມື່ອໃຊ້ເປັນຄຳອຸບປະມາອຸບປະມັຍກັບການບໍ່ຊື່ສັດກັບພະເຈົ້າໂດຍການນະມັດສະການພະທຽມເທັດ
- ໃນສະໄໝບູຮານ ບາງວິຫານຂອງຄົນຕ່າງຊາດໃຊ້ໂສເພນີຜູ້ຊາຍແລະຜູ້ຍິງເປັນສ່ວນໜຶ່ງຂອງພິທີກຳຂອງພວກເຂົາ
- ຄຳນີ້ສາມາດແປໂດຍຄຳຫລືປະໂຫຍກທີ່ໃຊ້ໃນພາສາອັນເພື່ອອ້າງເຖິງໂສເພນີ ບາງພາສາອາດມີຄຳສຸພາບໃນການນີ້

## ໂອບາດີຢາ

### ຂ້ເທັດຈິງ

ໂອບາດີຢາ ເປັນ ຜູ້ປະກາດພຣະທັມ ໃນພັນທະສັນຍາເດີມ ທີ່ເຜີຍພຣະທັມ ຕໍ່ຕ້ານຊາວເມືອງເອໂດມ ເຊິ່ງເປັນລູກຫລານຂອງເອຊາວ
ຍັງມີຜູ້ຊາຍອີກ ຫລາຍຄົນ ໃນພັນທະສັນຍາເດີມ ທີ່ມີຊື່ວ່າໂອບາດີຢາ ດ້ວຍ.

- ພຣະທັມ ໂອບາດີຢາ ເປັນພຣະທັມ ເຫລັ້ມທີ່ສັ້ນທີ່ສຸດ ໃນພັນທະສັນຍາເດີມ ແລະບອກເຖິງ ຄຳທຳນວາຍ ທີ່ໂອບາດີຢາ
  ໄດ້ຮັບຜ່ານທາງນິມິດ ຈາກພຣະເຈົ້າ.
- ຍັງບໍ່ເປັນທີ່ຊັດເຈນວ່າ ໂອບາດີຢາ ມີຊີວິດຢູ່ ຫລືເຜີຍພຣະທັມເມື່ອໃດ ອາດເປັນຊ່ວງ ການປົກຄອງ ຂອງກະສັດແຫ່ງ ຢູດາຄືກະສັດ
  ເຢໂຮຮາມ, ອາຮາດຢາ, ໂຢອາດ, ແລະອາທາລີຢາ, ຜູ້ປະກາດພຣະທັມ ດານີເອນ, ເອເຊກຽນ, ແລະເຢເຣມີຢາ
  ອາດເຮັດການທຳນວາຍ ໃນຊ່ວງເວລາດຽວກັນດ້ວຍ.
- ໂອບາດີຢາ ອາດມີຊີວິດຢູ່ ໃນຊ່ວງທ້າຍການປົກຄອງ ຂອງເຊເດກີຢາ ແລະຊ່ວງເວລາທີ່ເປັນຊະເລີຍ ໃນບາບີໂລນ.
- ບຸກຄົນ ອື່ນທີ່ມີຊື່ວ່າ ໂອບາດີຢາ ລວມເຖິງ ຜູ້ສືບເຊື້ອສາຍມາຈາກກະສັດ ໂຊມ, ຜູ້ຊາຍຈາກເຜົ່າກາດ ເຊິ່ງຕໍ່ມາ
  ກາຍເປັນຄົນຂອງດາວິດ, ຜູ້ເບິ່ງແຍງພຣະຣາຊະວັງ ຂອງກະສັດອາຮາບ, ຂ້າຣາຊການ ຂອງກະສັດເຢໂຮຊາຟັດ ເຊິ່ງແມ່ນຜູ້ຊາຍ
  ທີ່ຊ່ວຍສ້ອມແປງພຣະວິຫານ ໃນສະໄໝຂອງກະສັດ ໂຢສີຢາ; ຜູ້ຊາຍຊາວເລວີ ຜູ້ເຝົ້າປະຕູ ໃນສະໄໝ ຂອງຜູ້ປະກາດພຣະທັມ
  ເນເຫມີຢາ.
- ອາດເປັນໄປໄດ້ ຜູ້ຂຽນພຣະທັມ ໂອບາດີຢາ ນັ້ນອາດເປັນຜູ້ຊາຍເຫລົ່ານີ້ຄົນໃດ ຄົນໜຶ່ງ.

## ໂອ້ອວດ, ເວົ້າໂອ້ອວດ

### ນິຍາມ

ຄຳວ່າ "ໂອ້ອວດ" ໝາຍເຖິງເວົ້າດ້ວຍຄວາມພູມໃຈກ່ຽວກັບບາງສິ່ງບາງຢ່າງຫຼືບາງຄົນ. ເລື້ອຍໆມັນໝາຍຄວາມວ່າຈະໂອ້ອວດຕົວເອງ.

- ບາງຄົນທີ“ ອວດອ້ົງ” ເວົ້າກ່ຽວກັບຕົວເອງດ້ວຍຄວາມພູມໃຈ.
- ພຣະເຈົ້າສັ່ງຫ້າມຊາວອິດສະລາແອນສຳລັບການ“ ອວດອ້າງໃນຮູບເຄົ້າລົບຂອງພວກເຂົາ.
  ພວກເຂົານະມັດສະການພະປອມຕ່າງໆຢ່າງໂຫດຮ້າຍແທນທີ່ຈະເປັນພຣະເຈົ້າຫ່ຽງແທ້.
- ພຣະຄຳພີຍັງເວົ້າກ່ຽວກັບຄົນທີ່ອວດອ້າງໃນສິ່ງຕ່າງໆເຊັ່ນວ່າຄວາມຮັ່ງມີ, ຄວາມເຂັ້ມແຂງຂອງພວກເຂົາ, ຂົງເຂດທີ່ມີ
  ໝາກໄມ້ແລະກົດໝາຍຂອງພວກເຂົາ.
  ນິໝາຍຄວາມວ່າພວກເຂົາພູມໃຈໃນສິ່ງເຫລົ່ານີ້ແລະບ່ຍອມຮັບວ່າພຣະເຈົ້າເປັນຜູ້ໃຫ້ສິ່ງເຫລົ່ານີ.
- ພຣະເຈົ້າສຳແດງລິດອຳນາດໃຫ້ຊາວອິດສະລາແອນແທນທີ່ຈະ“ ອວດອ້າງ” ຫຼືພູມໃຈໃນຄວາມຈິງທີ່ວ່າພວກເຂົາຮູ້ຈັກລາວ.
- ອັກຄະສາວົກໂປໂລຍັງເວົ້າກ່ຽວກັບການໂອ້ອວດໃນພຣະຜູ້ເປັນເຈົ້າ,
  ຊຶ່ງໝາຍຄວາມວ່າມີຄວາມຍິນດີແລະຂອບໃຈພຣະເຈົ້າສຳລັບທຸກສິ່ງທີ່ລາວໄດ້ເຮັດເພື່ອພວກເຂົາ.

### ຄຳແນະນຳໃນການແປ

- ວິທີການອື່ນທີ່ຈະແປວ່າ "ໂອ້ອວດ" ອາດປະກອບມີ "ໂອ້ອວດ" ຫລື "ເວົ້າດ້ວຍຄວາມພູມໃຈ" ຫລື "ອວດອ້າງ".


generated on Thu Jul 10 08:45:04 2025

- ຄຳວ່າ "ອວດອ້າງ" ສາມາດຖືກແປໂດຍຄຳສັບຫລືປະໂຫຍກທີ່ມີຄວາມໝາຍວ່າ "ເວົ້າດ້ວຍຄວາມພາກພູມໃຈ" ຫລື "ເວົ້າໂອ້ອວດ" ຫລື "ເວົ້າໂອ້ອວດດ້ວຍຕົນເອງ."
- ໃນແງ່ຂອງການອວດອ້າງຫລືຮູ້ຈັກພຣະເຈົ້າ, ສິ່ງນີ້ສາມາດຖືກແປວ່າ "ຄວາມພາກພູມໃຈໃນ" ຫລື "ຄວາມສູງສົ່ງໃນ" ຫລື "ດີໃຈຫລາຍ" ຫລື "ຂອບໃຈພຣະເຈົ້າ."
- ບາງພາສາມີສອງຄຳສຳລັບ "ຄວາມພາກພູມໃຈ": ໜຶ່ງ ແມ່ນຄຳທີ່ບໍ່ດີ, ເຊິ່ງມີຄວາມໝາຍວ່າເປັນຄົນຈອງຫອງ, ແລະອີກຄຳໜຶ່ງທີ່ເປັນບວກ, ເຊິ່ງມີຄວາມໝາຍໃນການຖືເອົາຄວາມພາກພູມໃຈໃນວຽກງານ, ຄອບຄົວຫລືປະເທດໃດ ໜຶ່ງ.

## ໂຮເຊຢາ

### ຂໍ້ເທັດຈິງ

ໂຮເຊຢາເປັນຊື່ກະສັດຂອງອິດສະຣາເອນ ແລະເປັນຊື່ຊາຍອີກຫລາຍຄົນໃນພັນທະສັນຍາເດີມ.

- ໂຮເຊຢາເປັນຊື່ກະສັດຂອງອິດສະຣາເອນເປັນເວລາເກົ້າປີໃນລະຫວ່າງສ່ວນໜຶ່ງຂອງຣາຊການຂອງອາຮາຍ ແລະເຮເຊກີຢາ, ກະສັດແຫ່ງຢູດາຍ.
- ໂຢຊວຍລູກຊາຍຂອງນູນກ່ອນໜ້ານັ້ນເຄີຍຊື່ວ່າໂຮເຊຢາ ໂມເຊໄດ້ປ່ຽນຊື່ໂຮເຊຢາເປັນໂຢຊວຍກ່ອນທີ່ຈະສົ່ງທ່ານແລະຜູ້ຊາຍອີກສິບເອັດຄົນໄປສອດແນມໃນແຜ່ນດິນການາອານ.
- ຫລັງຈາກທີ່ໂມເຊເສຍຊີວິດແລ້ວ, ໂຢຊວຍນຳປະຊາກອນອິດສະຣາເອນເຂົ້າໄປຄອບຄອງແຜ່ນດິນການາອານ.
- ຜູ້ຊາຍອີກຄົນໜຶ່ງທີ່ຊື່ໂຮເຊຢາເປັນບຸດຊາຍຂອງອາບີໄຊແລະເປັນຜູ້ນຳຄົນໜຶ່ງຂອງເຜົ່າເອຟຣາອິມ.

## ໂຮເຣັບ

### ຂໍ້ເທັດຈິງ

ພູເຂົາໂຮເຣັບເປັນອີກຊື່ໜຶ່ງຂອງພູເຂົາຊີນາຍ ທີ່ພຣະເຈົ້າໄດ້ປະທານແຜ່ນຫີນຈາລຶກພຣະບັນຍັດສິບປະການໃຫ້ແກ່ໂມເຊ.

- ພູເຂົາໂຮເຣັບໄດ້ຊື່ວ່າ "ພູເຂົາຂອງພຣະເຈົ້າ."
- ໂຮເຣັບເປັນສະຖານທີ່ທີ່ໂມເຊໄດ້ເບິ່ງເຫັນພຸ່ມໄມ້ທີ່ໄຟລຸກຢູ່ເມື່ອທ່ານກຳລັງລ້ຽງດູຝູງແກະ.
- ພູເຂົາໂຮເຣັບເປັນສະຖານທີ່ພຣະເຈົ້າໄດ້ເປີດເຜີຍພັນທະສັນຍາແກ່ຄົນອິດສະຣາເອນໂດຍໃຫ້ພວກເຂົາໄດ້ຮັບແຜ່ນຫີນທີ່ມີພຣະບັນຍັດຂອງພຣະອົງຂຽ
- ນີ້ເປັນສະຖານທີ່ທີ່ພຣະເຈົ້າຕໍ່ມາໄດ້ກ່າວກັບໂມເຊໃຫ້ຕີຫີນເພື່ອຈັດຫານ້ຳໃຫ້ກັບຄົນອິດສະຣາເອນທີ່ກະຫາຍນ້ຳຂະນະທີ່ເຂົາກຳລັງເດີນທາງຢູ່ໃນທະເລຊ
- ສະຖານທີ່ແນ່ນອນຂອງພູເຂົານີ້ບໍ່ເປັນທີ່ຮູ້ກັນ, ແຕ່ອາດຈະຢູ່ທາງຕອນໃຕ້ຂອງຄາບທະເລຊີນາຍ.
- ເປັນໄປໄດ້ວ່າ "ໂຮເຣັບ" ເປັນຊື່ທີ່ແທ້ຈິງຂອງພູເຂົາແລະ "ພູເຂົາຊີນາຍ" ຫລື "ພູເຂົາແຫ່ງຊີນາຍ," ອ້າງເຖິງຂໍ້ເທັດຈິງວ່າພູເຂົາໂຮເຣັບຕັ້ງທີ່ຢູ່ໃນທະເລຊາຍຊີນາຍ.

## ໂຮເສອາ

### ຂໍ້ເທັດຈິງ

ໂຮເສອາເປັນຜູ້ປະກາດພຣະທຳຂອງອິດສະຣາເອນປະມານ 750 ປີກ່ອນ ຄ.ສ.

- ການປະຕິບັດຂອງເຂົາຄົງຢູ່ເປັນເວລາຫລາຍປີຕະຫລອດຣາຊການຂອງກະສັດຫລາຍພຣະອົງ ເຊັ່ນ ເຢໂຣໂບອາມ, ເຊກາລີຢາ, ໂຢທາມ, ອາຮາບ, ໂຮເສອາ, ອຸດຊີຢາ, ແລະເຮເຊກີຢາ.
- ພຣະເຈົ້າບອກກັບໂຮເສອາໃຫ້ແຕ່ງງານກັບຍິງໂສເພນີທີ່ຊື່ວ່າໂກເມ ແລະຮັກນາງຕໍ່ໄປ ເຖິງວ່ານາງຈະບໍ່ຊື່ສັດກັບເຂົາ.
- ນີ້ເປັນພາບປຽບທຽບຄວາມຮັກຂອງພຣະເຈົ້າສຳລັບຄົນຂອງພຣະອົງທີ່ບໍ່ສັດຊື່ ຄືອິດສະຣາເອນ.
- ໂຮເສອາໄດ້ປະກາດພຣະທຳຕໍ່ປະຊາກອນອິດສະຣາເອນໂດຍການເຕືອນພວກເຂົາ, ໃຫ້ເລີກບູຊາຮູບເຄົາລົບ.

## ໃນພຣະຄຣິດ,ໃນພຣະເຢຊູ,ໃນອົງພຣະຜູ້ເປັນເຈົ້າ,ໃນພຣະອົງ

### ນິຍາມ

ກໍຣະນີ "ໃນພຣະຄຣິດ"ແລະຄຳຕ່າງໆທີ່ກ່ຽວຂ້ອງ ໝາຍເຖິງພາວະຫຼືສະພາບຂອງການມີຄວາມສຳພັນກັບພຣະເຢຊູຄຣິດ ຜ່ານທ່າງຄວາມເຊື່ອໃນພຣະອົງເຈົ້າ

- ຄຳອື່ນໆທີ່ກ່ຽວຂ້ອງລວມເຖິງ "ໃນພຣະຄຣິດ ພຣະເຢຊູ ໃນພຣະເຢຊູຄຣິດ ໃນອົງພຣະເຢຊູຄຣິດເຈົ້າ"


generated on Thu Jul 10 08:45:04 2025

- ຄວາມໝາຍທີ່ເປັນໄປໄດ້ຂອງຄຳວ່າ "ໃນພຣະຄຣິດເຈົ້າ"ສາມຄລວມເຖິງ "ເພາະທ່ານເປັນຂອງພຣະຄຣິດ" ຫຼື "ໂດຍທາງຄວາມສຳພັນທີ່ທ່ານມີກັບພຣະຄຣິດ" ຫຼື " ຂຶ້ນຢູ່ກັບຄວາມເຊື່ອຂອງທ່ານໃນພຣະຄຣິດເຈົ້າ"
- ຄຳສັບທີ່ກ່ຽວຂ້ອງເຫຼົ່ານີ້ທັ້ງ
ໝົດມີຄວາມໝາຍດຽວກັນຄືການຢູ່ໃນສະພາບຂອງການເຊື່ອໃນພຣະເຢຊູຄຣິດເຈົ້າແລະເປັນສາວົກຂອງພຣະອົງ
- ໝາຍເຫດ: ບາງຄັ້ງຄຳວ່າ "ໃນ" ຈະໃຊ້ຄູ່ກັບຄຳກະຣິຍາ ຍົກຕົວຢ່າງເຊັ່ນ "ມີສ່ວນຮ່ວມໃນພຣະຄຣິດ" ໝາຍເຖິງການ "ມີສ່ວນຮ່ວມໃນ"ຜົນປະໂຍດທີ່ມາຈາກການຮູ້ຈັກພຣະເຢຊູຄຣິດ ການ "ມີຄວາມຍຶນດີໃນ" ພຣະຄຣິດໝາຍ
ເຖິງການຮູ້ສຶກຍຶນດີແລະສັນລະເສີນພຣະເຈົ້າສຳຫຼັບສິ່ງທີ່ພຣະເຢຊູຊົງເປັນແລະສິ່ງທີ່ພຣະອົງໄດ້ຊົງກະທຳ ການ "ເຊື່ອໃນ"
ໝາຍເຖິງການໄວ້ວາງໃຈໃນພຣະອົງໃນຖານະທີ່ເປັນພຣະຜູ້ຊ່ວຍໃຫ້ລອດແລະຮູ້ຈັກພຣະອົງ

**ຄຳແນະນຳໃນການແປ**

## ໃນພຣະຄຳພີເກົ່າ, ເປັນລຸງ ແລະ ເປັນພໍ່ເຖົ້າຂອງຢາໂຄບ

### ຂໍ້ເທັດຈິງ

- ຢາໂຄບອາໄສຢູ່ກັບຄອບຄົວຂອງລາບັນໃນປາດານອາຣັມ ແລະ ດູແລລ້ຽງດູຝູງເກາະ, ແລະ ແບ້.
ເຊິ່ງເປັນເງື່ອນໄຂໃນການແຕ່ງງານກັບລູກສາວຂອງລາບັນ
- ຢາໂຄບນັ້ນມີຄວາມພຶງພໍໃຈກັບລາເຊວລູກສາວຂອງລາບັນເຊິ່ງເປັນເມຍຂອງຢາໂຄບ
- ລາບັນລອກລວງຢາໂຄບໃຫ້ລາວແຕ່ງງານກັບລູກສາວກົກຄືເລອາກ່ອນທີ່ຈະມອບລາເຊວໃຫ້ແກ່ລາວເພື່ອເປັນເມຍ

## ໄມ້ກາງແຂນ

### ນິຍາມ

ໃນຊ່ວງເວລາຂອງພຣະຄັມພີ ໄມ້ກາງແຂນເປັນເສົາໄມ້ທີ່ຕັ້ງຢູ່ໃນພື້ນທີ່ໂດຍມີໄມ້ຄານແນວນອນຕິດຢູ່ໃກ້ກັບດ້ານເທິງ.

- ໃນຊ່ວງເວລາຂອງຈັກກະພັດໂຣມ ລັດຖະບານໂຣມ ຈະປະຫານອາດຊະຍາກອນ ໂດຍຜູກ ຫຼື
ຕອກຕະປູຕິດພວກເຂົາໄວ້ກັບໄມ້ກາງແຂນ ແລະຖິ້ມປະໄວ້ໃຫ້ຕາຍ.
- ພຣະເຢຊູໄດ້ຖືກກ່າວໂທດຢ່າງຜິດໆ ວ່າເປັນອາດຊະຍາກອນທີ່ພຣະອົງບໍ່ໄດ້ກະທຳ
ແລະຊາວໂຣມໄດ້ທຳໃຫ້ພຣະອົງເສຍຊີວິດເທິງໄມ້ກາງແຂນ.
- ໂປດຮູ້ວ່ານີ້ເປັນຄຳທີ່ແຕກຕ່າງ ໄປຈາກຄຳກິຣິຍາ"ຂ້າມ"ຊຶ່ງ

ຫມາຍເຖິງການຂ້າມໄປຍັງອີກດ້ານໜຶ່ງຂອງບາງສິ່ງ ບາງຢ່າງເຊັ່ນ ແມ່ນ້ຳຫຼື ທະເລສາບ.

**ຄຳແນະນຳໃນການແປ**

- ຄຳນີ້ອາດແປ ໂດຍໃຊ້ຄຳໃນພາສາທີ່ຈະແປ ຊຶ່ງກ່າວເຖິງຮູບແບບ

ຂອງໄມ້ກາງແຂນ.

- ພິຈາຣະນາອະທິບາຍ ໄມ້ກາງແຂນວ່າ ເປັນສິ່ງທີ່ໃຊ້ຂ້າຄົນ

ຈຶ່ງມີການໃຊ້ຄວາມເວົ້າເຊັ່ນ "ຫຼັກປະຫານ" ຫຼື "ຕົ້ນໄມ້ແຫ່ງຄວາມຕາຍ".

- ພິຈາຣະນາຄຳແປນີ ໃນການແປພຣະຄຳພີ ດ້ວຍພາສາທ້ອງຖິ່ນ ຫຼື ພາສາກາງດ້ວຍ.

## ໃສ່, ແຕ່ງຕົວ

### ນິຍາມ

ເມື່ອໃຊ້ຄຳປຽບທຽບໃນພຣະຄຳພີ, "ໃສ່ດ້ວຍ" ມີຄວາມ ໝາຍວ່າ ການທຳໃຫ້ຫຼືຕິດຕັ້ງດ້ວຍບາງສິ່ງ. ຄຳວ່າ "ສວມໃສ່."
ຕົວເອງດ້ວຍບາງສິ່ງໝາຍເຖິງການສະແຫວງຫາທີ່ຈະມີລັກສານະບຸກຄະລິກສານະສະເພາະບາງຢ່າງ.

- ເຊັ່ນດຽວກັບເສື້ອຜ້າທີ່ຢູ່ພາຍນອກຮ່າງກາຍແລະທຸກຄົນທີ່ເບິ່ງເຫັນໄດ້, ເມື່ອເຈົ້າ "ສວມໃສ່ " ດ້ວຍລັກສານະບຸກຄະລິບາງຢ່າງ
ຄົນອື່ນກໍສາມາດແນມເຫັນໄດ້ໃນທັນທີ. "ການນຸ່ງໃສ່ຕົວຂອງເຈົ້າເອງດ້ວຍຄວາມກະລຸນາ"
ໝາຍເຖິງໃຫ້ການກະທຳທີ່ກະລຸນາເປັນທີ່ເຫັນໄດ້ຢ່າງຊັດເຈນຕໍ່ທຸກຄົນ.


generated on Thu Jul 10 08:45:04 2025

- "ສວມໃຫ້ດ້ວຍຣິດອຳນາດຈາກເບື້ອງເທິງ" ໝາຍເຖິງການທີ່ເຈົ້າໄດ້ຮັບມອບຣິດອຳນາດ.
- ຄຳນີ້ຍັງໃຊ້ອະທິບາຍປະສົບການທາງດ້ານລົບຢ່າງເຊັ່ນ "ສວມໃຫ້ດ້ວຍຄວາມອັບອາຍ" ຫຼື " ນຸ່ງເສື້ອດ້ວຍຄວາມຕົກໃຈ"

**ຄຳແນະນຳໃນການແປ**

- ຖ້າເປັນໄປໄດ້, ການຮັກສາໂຄງສ້າງຂອງຄຳຕາມຕົວໜັງສື

ເປັນວິທີທີ່ດີທີ່ສຸດ, ຄຳວ່າ "ນຸ່ງໃສ່ຕົວເຈົ້າເອງດ້ວຍ." ຄຳນີ້ສາມາດແປໄດ້ອີກຮູບແບບໜຶ່ງວ່າ "ນຸ່ງເຄື່ອງ" ຖ້າກ່າວເຖິງການໃສ່ເສື້ອຜ້າ.

- ຖ້າຄຳນັ້ນບໍ່ໄດ້ໃຫ້ຄວາມໝາຍທີ່ຖືກຕ້ອງ, ການແປ "ນຸ່ງເຄື່ອງດວ້ຍ" ຮູບແບບອື່ນໆໄດ້ວ່າ "ການສະແດງໃຫ້ເຫັນ" ຫຼື "ການເຫັນດ້ວຍຕາ" ຫຼື "ເຕີມເຕັມດ້ວຍ" ຫຼື "ການມີຄຸນນະພາບຂອງ."
- ຄຳວ່າ "ນຸ່ງໃສ່ຕົວເອງດ້ວຍ" ສາມາດແປໄດ້ວ່າ "ປົກຄຸມຕົວເອງດ້ວຍ" ຫຼື "ກະທຳໃນລັກສະນະທີ່ສະແດງໃຫ້ເຫັນໄດ້.

## ໃຫ້ກຳລັງໃຈ, ການໃຫ້ກຳລັງໃຈ

**ນິຍາມ**

ຄຳວ່າ "ໃຫ້ກຳລັງໃຈແລະການໃຫ້ກຳລັງໃຈ" ເວົ້າເຖິງການເວົ້າແລະການເຮັດໃນສິ່ງທີ່ຈະເຮັດໃຫ້ບາງຄົນມີຄວາມສະບາຍໃຈ, ຄວາມຫວັງ, ຄວາມໝັ້ນໃຈ, ແລະຄວາມກ້າຫານ.

- ຄຳທີ່ຄ້າຍກັນແມ່ນ "ໃຫ້ຄຳແນະນຳ," ຊຶ່ງໝາຍຄວາມວ່າເພື່ອກະຕຸ້ນໃຫ້ບາງຄົນປະຕິເສດການເຮັດໃນສິ່ງທີ່ບໍ່ຖືກຕ້ອງ ແລະເພື່ອໃຫ້ເຮັດສິ່ງທີ່ດີແລະຖືກຕ້ອງ.
- ອັກຄະສາວົກໂປໂລຜູ້ຂຽນພັນທະສັນຍາໃໝ່ໄດ້ສອນຄຣິສຕຽນໃຫ້ກຳລັງໃຈຊຶ່ງກັນແລະກັນ ຮັກແລະຮັບໃຊ້ຜູ້ອື່ນ.

**ຄຳແນະນຳໃນການແປ**

- ວິທີການແປ "ໜູນໃຈ" ອາດຈະລວມເຖິງ, "ກະຕຸ້ນ" ຫລື "ຊຸໃຈ" ຫລື "ເວົ້າດ້ວຍຄວາມເມດຕາ" ຫລື "ຊ່ວຍເຫລືອແລະສະໜັບສະໜູນ." ທັ້ງນີ້ແມ່ນຂຶ້ນກັບກໍລະນີນັ້ນໆ
- ຖ້ອຍຄຳທີ່ວ່າ, "ເວົ້າໃຫ້ກຳລັງໃຈ" ໝາຍເຖິງ, "ເວົ້າສິ່ງທີ່ເຮັດໃຫ້ຄົນອື່ນຮູ້ສຶກຮັກ, ໄດ້ຮັບການຍອມຮັບ, ແລະມີພະລັງ."

## ໃຫ້ຄຳປຶກສາ, ທີ່ປຶກສາ, ໃຫ້ຄຳແນະນຳ, ຜູ້ໃຫ້ຄຳແນະນຳ

**ນິຍາມ**

ຄຳວ່າ "ໃຫ້ຄຳປຶກສາ" ແລະ "ໃຫ້ຄຳແນະນຳ" ມີຄວາມໝາຍ
ເໝືອນກັນແລະໝາຍເຖິງການຊ່ວຍໃຫ້ຜູອື່ນເລືອກຢ່າງຖືກຕ້ອງກ່ຽວກັບສິ່ງທີ່ຕ້ອງທຳໃນສະຖານະການສະເພາະ "ທີ່ປຶກສາ" ຫຼື "ຜູ້ໃຫ້ຄຳແນະນຳ" ທີ່ສະຫຼາດ. ຄືຄົນທີ່ໃຫ້ຄຳແນະນຳ ຫຼື ໃຫ້ຄຳປຶກສາ ຊຶ່ງຈະຊ່ວຍໃຫ້ບຸກຄົນຕັດສິນໃຈໄດ້ຢ່າງຖືກຕ້ອງ.

- ກະສັດມັກມີພວກຜູ້ໃຫ້ຄຳແນະນຳ ຫຼື ພວກທີ່ປຶກສາຢ່າງເປັນທາງການເພື່ອຊ່ວຍໃນການຕັດສິນໃຈ ເລື່ອງສຳຄັນ ທີ່ສົ່ງຜົນກະທົບຕໍ່ປະຊາຊົນທີ່ພວກເຂົາປົກຄອງຢູ່.
- ບາງຄັ້ງຄຳແນະນຳຫຼືຄຳປຶກສາທີ່ໄດ້ຮັບບໍ່ດີ.
ຜູ້ໃຫ້ຄຳແນະນຳທີ່ຊົ່ວຮ້າຍອາດຈະກະຕຸ້ນໃຫ້ກະສັດດຳເນີນການຫຼືອອກກົດໝາຍຊຶ່ງຈະທຳລາຍກະສັດເອງ ຫຼື ປະຊາຊົນຂອງເພິ່ນ.
- "ໃຫ້ຄຳແນະນຳ" ຫຼື "ໃຫ້ຄຳປຶກສາ" ອາດແປວ່າ ຊ່ວຍໃນການຕັດສິນໃຈ" ຫຼື "ໃຫ້ຄຳປຶກສາ" ຫຼື ຄຳແນະນຳ " ຫຼື "ແນວທາງ." ນີ້ຂຶ້ນຢູ່ກັບກໍລະນີນັ້ນໆ
- ໃນທາງປະຕິບັດ, "ໃຫ້ຄຳປຶກສາ" ອາດແປວ່າ "ໃຫ້ຄຳແນະນຳ" ຫຼື "ໃຫ້ຂໍ້ສະເໜີແນະ" ຫຼື "ໃຫ້ຂໍ້ແນະນຳ."
- ໂປດຮູ້ວ່າ "ທີ່ປຶກສາ" ເປັນຄຳທີ່ຕ່າງຈາກ "ສະພາ," ຊຶ່ງໝາຍເຖິງກຸ່ມຄົນ.

## ໄຊປຣັດ

### ຂໍ້ເທັດຈິງ

ໄຊປຣັດເປັນເກາະທີ່ຢູ່ໃນທະເລເມດິເຕຣານເນຊຶ່ງຢູ່ຫ່າງຈາກປະເທດຕູຣະກີ (ປະຈຸບັນ) ປະມານ 64 ກິໂລແມັດ.

- ບານາຣາບາມາຈາກ ໄຊປຣັດ ດັ່ງນັ້ນໝໍ້ຈະເປັນໄປໄດ້ທີ


generated on Thu Jul 10 08:45:04 2025

ລູກພີ່ລູກນ້ອງຂອງເຂົາ ຄືໂຢຮັນ ມາຣາໂກ ກໍມາຈາກທີ່ນັ້ນດ້ວຍ.

- ໂປໂລແລະບານາຣາບາ ໄດ້ເຫດສະໜາປະກາດຮ່ວມກັນເທິງ

ເກາະໄຊປຣັດ ໃນຕອນແຮກ ຂອງການເດີນທາງເຜີຍແຜ່ຄຣິສຕະສາດສະໜາຄັ້ງທຳອິດ ໂຢຮັນ
ມາຣາໂກກໍມາຊ່ວຍງານພວກເຂົາໃນການເດີນທາງຄັ້ງນັ້ນ.

- ພາຍຫຼັງ ບາຣນາບາແລະມາຣາໂກ ໄດ້ໄປຢ້ຽມໄຊປຣັດອີກຄັ້ງໜຶ່ງ .
- ໃນພັນທະສັນຍາເດີມ ເກາະໄຊປຣັດໄດ້ຮັບການກ່າວເຖິງ

ວ່າເປັນແຫຼ່ງທີ່ອຸດົມໄປດ້ວຍຕົ້ນສົນສາມໃບ.

## ໄຊຣັສ

### ຂໍ້ເທັດຈິງ

ໄຊຣັສ ເປັນກະສັດເປີເຊຍທີ່ກໍ່ຕັ້ງຈັກກະພັດເປີເຊຍຂຶ້ນໃນປີ 550, ກ່ອນຄຣິສຕະສັກກະຣາດ. ດ້ວຍການຊະນະສົງຄາມ
ໃນປະຫວັດສາດພຣະອົງເປັນທີ່ຮູ້ຈັກໃນຖານະໄຊຣັສມະຫາຣາຊ

- ກະສັດໄຊຣັສຍຶດເມືອງບາບີໂລນ ຊຶ່ງນຳໄປສູ່ການປົດປ່ອຍ

ອິດສະຣາເອນທີ່ຖືກຈັບໄປເປັນຊະເລີຍຢູ່ທີ່ນັ້ນ.

- ກະສັດໄຊຣັສເປັນທີ່ຮູ້ຈັກໃນເລື່ອງທັດສະນະຄະຕິທີ່ອົດທົນ

ໜັກແໜ້ນຕໍ່ປະຊາຊົນໃນປະເທດຕ່າງໆ ທີ່ລົບຊະນະ. ຄວາມ
ເມດຕາຂອງພຣະອົງຕໍ່ຄົນຍິວນຳໄປສູ່ການສ້າງວິຫານໃນເຢຣູຊາເລັມຂຶ້ນໃໝ່ພາຍຫຼັງການຕົກເປັນຊະເລີຍ.

- ໄຊຣັສໄດ້ຄອງຣາດຊະສົມບັດໃນຊ່ວງເວລາ ທີ ດານີເອນ

ເອສຣາ ແລະເນເຫມີຢາມີຊີວິດຢູ່.

## ໄຊຣີນ

### ຂໍ້ເທັດຈິງ

ໄຊຣີນເປັນເມືອງກຣີກຢູ່ທາງຊາຍຝັ່ງຕອນເຫນືອຂອງທະ ວີບອາຟຣິກກາ ເໜືອທະເລເມດິເຕຣານເນ ທາງໃຕ້ຂອງເກາະກຣີກ.

- ໃນພັນທະສັນຍາໃໝ່ ທັງຄົນຍິວແລະພວກຄຣິສະຕຽນໄດ້ອາສັຍຢູ່ໃນໄຊຣີນ.
- ໄຊຣີອາດຈະເປັນທີ່ຮູ້ຈັກກັນແຜ່ຫຼາຍທີ່ສຸດໃນພຣະຄຳພີ ວ່າເປັນເມືອງ ບ້ານເກີດຂອງຊາຍຄົນໜຶ່ງທີ່ຊື
  ຊີໂມນຊຶ່ງເປັນຜູ້ທີ່ໄດ້ແບກໄມ້ກາງແຂນຂອງພຣະເຢຊູ.

## ໄຖ່, ການໄຖ່, ຜູ້ໄຖ່

### ນິຍາມ

ຄຳສັບທີ່ວ່າ "ໄຖ່" ແລະ "ການໄຖ່" ໝາຍເຖິງການຊື້ສິ່ງຂອງທີ່ເຄີຍເປັນເຈົ້າຂອງຫຼືຖືກຈັບເປັນຊະເລີຍ. "ຜູ້ໄຖ່"
ແມ່ນຜູ້ທີ່ໄຖ່ບາງສິ່ງບາງຢ່າງຫຼືຄົນອື່ນ.

- ພຣະເຈົ້າໄດ້ໃຫ້ກົດໝາຍແກ່ຊາວອິສະຣາເອນກ່ຽວກັບວິທີການໄຖ່ຄົນຫຼືສິ່ງຂອງຕ່າງໆ.
- ຍົກຕົວຢ່າງ, ຜູ້ໃດຜູ້ ນຶ່ງ ສາມາດໄຖ່ຄົນທີ່ຕົກເປັນຂ້າທາດໂດຍການຈ່າຍຄ່າລາຄາເພື່ອໃຫ້ຂ້າໃຊ້ນັ້ນມີອິດສະຫຼະ. ຄຳ ວ່າ "ຄ່າໄຖ່"
  ກໍໝາຍເຖິງການປະຕິບັດນີ.
- ຖ້າທີ່ດິນຂອງຜູ້ໃດຜູ້ ນຶ່ງ ຖືກຂາຍໄປ, ຍາດພີ່ນ້ອງຂອງຄົນນັ້ນສາມາດ“ ໄຖ່ຄືນ” ຫລື“ ຊື້ຄືນ” ທີ່ດິນໄດ້ເພື່ອວ່າມັນຈະຢູ່ໃນຄອບຄົວ.
- ການປະຕິບັດເຫຼົ່ານີ້ສະແດງໃຫ້ເຫັນວ່າພຣະເຈົ້າຊົງໄຖ່ຄົນທີ່ຕົກເປັນທາດຂອງບາບ. ເມື່ອລາວຕາຍເທິງໄມ້ກາງແຂນ, ພຣະ
  ເຢຊູໄດ້ຈ່າຍເຕັ້ມ ສຳ ລັບບາບຂອງຜູ້ຄົນແລະໄດ້ໄຖ່ຜູ້ທີ່ໄວ້ວາງ ໃຈໃນພຣະອົງເພື່ອຄວາມລອດ.
  ຄົນທີ່ພຣະເຈົ້າໄດ້ໄຖ່ໄດ້ຖືກປົດປ່ອຍຈາກບາບແລະການລົງໂທດຂອງມັນ.


generated on Thu Jul 10 08:45:04 2025

**ຄຳແນະນຳໃນການແປ**

- ອີງຕາມສະພາບການ, ຄຳ ວ່າ "ໄຖ່" ຍັງສາມາດແປເປັນ "ຊື້ຄືນ" ຫລື "ຈ່າຍໃຫ້ລ້ຳໆ."

## ໄພພິບັດ

### ນິຍາມ

ໄພພິບັດເປັນເຫດການທີ່ເຮັດໃຫ້ເກີດຄວາມທຸກທໍລະມານຫລືຄວາມຕາຍແກ່ຄົນເປັນຈຳນວນຫລາຍ
ຫລາຍເທື່ອໄພພິບັດເປັນພະຍາດທີ່ລະບາດຢ່ໍາງວ່ອງໄວເຮັດໃຫ້ຄົນຫລວງຫລາຍຕ້ອງຕາຍກ່ອນທີ່ຈະສາມາດຢຸດຍັ້ງມັນໄດ້

- ໄພພິບັດຫຼາຍຢ່ໍາງເກີດຈາກທຳມະຊາດແຕ່ບາງຢ່ໍາງຖືກສົ່ງມາຈາກພຣະເຈົ້າເພື່ອລົງໂທດຄົນເພາະຄວາມບາບ
- ໃນຊ່ວງເວລາຂອງໂມເຊ ພຣະເຈົ້າໄດ້ສົ່ງໄພພິບັດສິບຢ່ໍາງຕໍ່ເອຢິບ ເພື່ອບັງຄັບໃຫ້ຟາຣາໂອ ປ່ອຍຄົນອິດສະລາເອນໄປຈາກເອຢິບ
  ໄພພິບັດພວກນີ້ທັ້ງໝົດໄປເຖິງການປ່ຽນນ້ຳໃຫ້ເປັນເລືອດ ໂລກລະບາດຫາງຮ່ໍາງກາຍ ການທຳລາຍພືດຜົນໂດຍແມງແລະລູກເຫັບ
  ສາມມືແຫ່ງຄວາມມືດສະນິດ ແລະການຕາຍຂອງບຸດຊາຍຫົວປີ
- ຄຳນີ້ຍັງສາມາດແປໄດ້ວ່ໍາ "ການແຜ່ຄວາມຈິບຫາຍ" ຫລື "ການແຜ່ພະຍາດ" ຂຶ້ນຢູ່ກັບກໍລະນີ

## ໄພວິບັດ

### ນິຍາມ

ຄຳວ່ໍາ "ວິບັດ " ມາຍເຖິງຄວາມຮູ້ສຶກທຸກໃຈເປັນຢ່ໍາງຍິ່ງ ມັນຍັງໃຊ້ຄຳເຕືອນທີ່ຄົນບາງຄົນຈະປະສົບກັບບັນຫາຢ່ໍາງຮ້ໍາຍແຮງ.

- ຂ້ໍຄວາມທີ່ວ່ໍາ "ວິບັດແກ່"
  ຈະຕາມມາດ້ວຍຄຳເຕືອນແກ່ປະຊາຊົນທີ່ພວກເຂົ້ໍາປະສົບກັບຄວາມທຸກທໍລະມານຄືເປັນການລົງໂທດສຳລັບຄວາມບາບຂອງພວກເຂົ້ໍາ.
- ໃນພຣະຄຳພີຫຼາຍໆຕອນ ຄຳວ່ໍາ "ວິບັດ"
  ຈະຖືກເວົ້ໍາຢູ່ເລື້ອຍໆເພື່ອໝາຍເຖິງໂດຍສະເພາະຢ່ໍາງຍິ່ງແມ່ນການພິພາກສາອັນເປັນທີ່ຢ້ານກົວ
- ບຸກຄົນທີ່ຖືກກ່ໍາວວ່ໍາ "ວິບັດຄືຂ້ໍາພະເຈົ້ໍາ" ຫຼື "ວິບັດແກ່ຂ້ໍາພະເຈົ້ໍາ" ຄືການສະແດງອອກມາເຖິງຄວາມທຸກທໍລະມານຢ່ໍາງຮ້ໍາຍແຮງ.

**ຄຳແນະນຳໃນການແປ:**

- ຂຶ້ນຢູ່ກັບກໍລະນີນັ້ນໆ ຄຳວ່ໍາ "ວິບັດ" ສາມາດແປວ່ໍາ "ຄວາມໂສກເສົ້ໍາຢ່ໍາງຍິ່ງ " ຫລື "ຄວາມເສົ້ໍາ" ຫລື "ໄພວິບັດ" ຫລື
  "ຄວາມພິນາດ"
- ວິທີອື່ນໃນການແປຂ້ໍຄວາມນີ້ "ວິບັດແກ່."

## ໄຟ

### ນິຍາມ

ໄຟຄືຄວາມຮ້ອນ, ຄວາມສະຫວ່ໍາງ,ແລະແປວໄຟທີ່ເກີດມາຈາກການທີ່ບາງສິ່ງຖືກເຜົ້ໍາ.

- ການເຜົ້ໍາໄມ້ດ້ວຍໄຟປ່ຽນໃຫ້ໄມ້ກາຍເປັນຂີ້ເຖ້ໍາ.
- ຄຳວ່ໍາ "ໄຟ" ຍັງໃຊ້ໃນຫາງປຽບທຽບ, ປ້ໍກກະຕິກ່ໍາວເຖິງການພິພາກສາຫຼືການຊຳຣະໃຫ້ບໍຣິສຸດ.
- ການພິພາກສາຄ້ັງສຸດທ້ໍາຍຂອງຜູ້ທີ່ບໍ່ສັດທ່ໍາຄືໄຟນ່ໍາຣົກ.
- ໄຟໃຊ້ໃນການທຳ່ໍາໃຫ້ຫອງຄຳ ຫຼືໂລຫະອື່ນໆບໍຣິສຸດ.ໃນພຣະຄັມພີ,
  ຂະບວນການນີ້ໃຊ້ອະທິບາຍເຖິງວິທີການທີ່ພຣະເຈົ້ໍາຊົ່ງຊຳຣະປະຊາຊນຫ່ໍານການລຳບາກຕ່ໍາງໆ ທີ່ເກີດຂຶ້ນໃນຊີວິດຂອງພວກເຂົ້ໍາ.
- ປະໂຫຍກທີ່ວ່ໍາ "ບັບຕິສະມ່ໍາດ້ວຍໄຟ" ສາມ່ໍາດແປໄດ້ວ່ໍາ,ທ່ໍາໃຫ້ທ່ໍານມີປະສົບປະການທຸກຍ່ໍາກລຳບາກທີ່ທ່ໍາໃຫ້ທ່ໍານບໍຣິສຸດ.


generated on Thu Jul 10 08:45:04 2025

## ໄມ້ສິບສາມໃບ

### ນິຍາມ

ຄຳວ່າ " ໄມ້ສິບສາມໃບ"
ກ່າວເຖິງຕົ້ນສິບຊະນິດໜຶ່ງທີ່ອຸດົມສົມບູນໃນບໍຣິເວນທີ່ຜູ້ຄົນອາໃສຢູ່ໃນຍຸກຂອງພຣະຄຳພີໂດຍສະເພາະປະເທດທີ່ມີພົມແດນຕິດກັບທະເລເມດິເຕຣານເນ.

- ໄຊປຣັດ ແລະເລບານອນເປັນສະຖານທີ່ສອງແຫ່ງທີ່ກ່າວເຖິງໃນພຣະຄຳພີວ່າມີຕົ້ນສິບສາມໃບຈຳນວນຫຼາຍ.
- ໄມ້ທີ່ໂນອາໃຊ້ໃນການສ້າງເຮືອນັ້ນອາດເປັນໄມ້ສິບສາມໃບ.
- ເນື່ອງຈາກໄມ້ສິບສາມໃບມີຄວາມທົນທານແລະໃຊ້ງານໄດ້ຍາວນານຫເຮັດໃຫ້ຄົນນຸຮານໃຊ້ສຳຫຼັບສ້າງເຮືອແລະງານໂຄງສ້າງອື່ນໆ.

## ໄມ້ເທົ້າ

### ນິຍາມ

ຄຳວ່າ ”ໄມ້ເທົ້າ”ແມ່ນອ້າງເຖິງໄມ້ທີ່ມີການປະດັບຫລືໄມ້ເທົ້າທີ່ຖືກຖືໂດຍພວກເຈົ້າຫນ້າທີ່ທີ່ມີອຳນາດປົກຄອງເຊັ່ນ ກະສັດ

- ໄມ້ເທົ້ານັ້ນດັ້ງເດີມແລ້ວເປັນກ້ຶງຂອງໄມ້ທີ່ມີການແກະສະລັກແຕກຕ່າງ ຕໍ່ມາໄມ້ເທົ້າໄດ້ເຮັດດ້ວຍໂລຫະທີ່ມີຄ່າ ເຊັ່ນທອງຄຳ
- ໄມ້ເທົ້າເປັນສັນຍາລັກຂອງຄວາມຈົ່ງຮັກພັກດີແລະອຳນາດຊຶ່ງເປັນສັນຍາລັກແຫ່ງກຽດແລະສັກສີທີ່ມີຄວາມກ່ຽວຂ້ອງກັບກະສັດ
- ໃນພັນທະສັນຍາເດີມ ພຣະເຈົ້າໄດ້ຖືກເວົ້າເຖິງເຊັ່ນວ່າພຣະອົງຊົງມຣໄມ້ເທົ້າແຫ່ງຄວາມຊອບທຳ
  ນີ້ເປັນການກ່ຽວຂ້ອງກັບພຣະເຈົ້າຜູ້ຊົງປົກຄອງເໜືອນກະສັດປົກຄອງປະຊາຊົນຂອງພຣະອົງ
- ຄຳທຳນວາຍໃນພັນທະສັນຍາເດີມອ້າງເຖິງພຣະເມຊີອາວ່າເປັນສັນຍາລັກຂອງໄມ້ເທົ້າທີ່ມາຈາກອິດສະຣາເອນທີ່ປົກຄອງເໜືອທຸກຊາດ
- ນີ້ສາມາດແປວ່າ”ໄມ້ປົກຄອງ”ຫລື ”ໄມ້ຂອງກະສັດ”

## ໄມ້ເທົ້າ

### ນິຍາມ

ໄມ້ເທົ້າເປັນໄມ້ຍາວຫລືໄມ້ແຫ່ງທີ່ຫລາຍເຫື່ອ, ໃຊ້ໃນເປັນໄມ້ທີ່ຊ່ວຍໃນການຍ່າງ

- ເມື່ອຢາໂຄບຊະລາລົງທ່ານເອງໃຊ້ໄມ້ເທົ້າ, ເພື່ອຊ່ວຍຕົວທ່ານໃນການຍ່າງ.
- ພຣະເຈົ້າຊົງປ່ຽນໄມ້ເທົ້າຂອງໂມເຊໃຫ້ກລາຍເປັນງູເພື່ອສະແດງອຳນາດຂອງພຣະອົງໃຫ້ແກ່ຟາໂຣ.
- ເຫລົ່າຄົນລ້ຽງແກະໃຊ້ໄມ້ເທົ້າໃນການຊ່ວຍນຳແກະຂອງພວກທ່ານເຊັ່ນກັນ ຫລືເພື່ອຊ່ວຍແກະເມື່ອມັນລົ້ມຫລືອອກນອກເສັ້ນທາງ.
- ໄມ້ເທົ້າຂອງຄົນລ້ຽງແກະ, ມີຂໍເທິ່ງປາຍໄມ້ຊຶ່ງແຕກຕ່າງຈາກໄມ້ຂອງຄົນລ້ຽງແກະທີ່ກົ່ງເພື່ອໃຊ້ຂ້າສັດຕ່າງໆ
  ທີ່ຈະມາເຮັດຮ້າຍຝູງແກະ.

## ໄລ່ຕາມທັນ, ຕາມທັນ

### ນິຍາມ

ຄຳວ່າ "ໄລ່ຕາມທັນ" ຫລື "ຕາມທັນ" ອ້າງເຖິງການພະຍາຍາມບັ່ງຄັບ ເຫນືອບາງຄົນ. ຫລື ບາງສິ່ງ ໂດຍຫົວໄປລວມເຖິງ ຄວາມຄິດ
ທີ່ຈັບບາງສິ່ງໄດ້ ຫລັງຈາກທີ່ພະຍາຍາມ ມາຈັກລະຍະຫນຶ່ງ.

- ເມື່ອກອງທັບທະຫານ "ໄລ່ຕາມທັນ" ສັດຕູ, ຫມາຍຄວາມວ່າພວກເຂົາ ເອົາຊະນະເໜືອສັດຕູ ໃນສະຫນາມຮົບ.
- ເມື່ອຜູ້ໄລ່ລ່າໄລ່ຕາມເຫຍື່ອທັນ, ໝາຍຄວາມວ່າຜູ້ລ່ານັ້ນໄດ້ພະຍາຍາມໄລ່ແລະສາມາດຕາມຈັບເຫຍື່ອໄດ້ທັນ.
- ເມື່ອຄຳສາບແຊ່ງ "ໄລ່ຕາມທັນ" ບາງຄົນ, ຫມາຍຄວາມວ່າແມ່ນຫຍັງກໍຕາມ ທີ່ກ່າວໄວ້ ໃນຄຳສາບແຊ່ງ
  ນັ້ນຈະເກີດຂຶ້ນກັບບຸກຄົນນັ້ນ.
- ຫາກພຣະພອນ ຕາມໃຜຄົນນຶ່ງທັນ, ຫມາຍຄວາມວ່າຄົນເຫລົ່ານັ້ນ ຈະໄດ້ຮັບພຣະພອນນັ້ນ.
- ຂຶ້ນຢູ່ກັບບໍຣິບົດ, ຄຳວ່າ "ໄລ່ຕາມທັນ" ສາມາດແປວ່າ "ຊະນະ" ຫລື "ຈັບໄດ້" ຫລື "ປາບ" ຫລື "ໄລ່ຕາມທັນ" ຫລື
  "ມີຜົນຢ່າງສົມບູນ."
- ນອກຈາກນີ້ ຄຳໃນອະດີດວ່າ "ໄດ້ໄລ່ຕາມທັນ" ສາມາດແປໄດ້ອີກຢ່າງຫນຶ່ງວ່າ "ໄດ້ໄລ່ຈັບທັນ" ຫລື "ໄດ້ມາທຽບຄູ່ຂະໜານກັນ" ຫລື
  "ໄດ້ເອົາຊະນະ" ຫລື "ໄດ້ມີປາບລົງ" ຫລື "ໄດ້ເຮັດໃຫ້ເກີດອັນຕະລາຍແກ່."
- ເມື່ອໃຊ້ເປັນຄຳເຕືອນວ່າ ຄວາມມືດມົດ ຫລື ການລົງໂທດຫລື ຄວາມໜ້າຢ້ານກົວ ຈະໄລ່ຕາມປະຊາກອນທັນ
  ເພາະບາບຂອງພວກເຂົານັ້ນ, ຫມາຍຄວາມວ່າ ຜູ້ຄົນເຫລົ່ານັ້ນ ຈະປະສົບກັບສິ່ງຊົ່ວຮ້າຍ ຫາກພວກເຂົາ ບໍ່ກັບໃຈ.


generated on Thu Jul 10 08:45:04 2025

- ຄຳເວົ້າທີ່ວ່າ, "ຖ້ອຍຄຳຂອງເຮົາກໍໄດ້ຕິດຕາມ ບັນພະບຸຣຸດຂອງເຈົ້າທັ້ນ" ຫມາຍຄວາມວ່າ ຄຳສັ່ງສອນ ຊຶ່ງ ພຣະເຈົ້າຢາເວໄດ້ມອບໄວ້ໃຫ້ ແກ່ບັນພະບຸຣຸດຂອງພວກເຂົານັ້ນ ບັດນີ້ຈະເປັນເຫດໃຫ້ພວກເຂົາ ໄດ້ຮັບການລົງໂທດ ເພາະພວກເຂົາບໍ່ໄດ້ເຊື່ອຟັງ ຄຳສັ່ງສອນເຫລົ່ານັ້ນ.

## ໄວ້ວາງໃຈ,ເຊື່ອຖືໄດ້,ຄວາມໜ້າເຊື່ອຖື

### ນິຍາມ

ຄຳວ່າ "ໄວ້ວາງໃຈ" ຍ້ອງເຖິງການເຊື່ອວ່າບາງສິ່ງບາງຢ່າງຫລືບາງຄົນເປັນຄວາມຈິງຫລືເຊື່ອຖືໄດ້. ບຸກຄົນທີ "ໜ້າເຊື່ອຖື" ສາມາດທີ່ຈະໄດ້ຮັບການວາງໃຈເພື່ອເຮັດຫລືກ່າວສິ່ງທີ່ຖືກຕ້ອງແລະເປັນຄວາມຈິງ.

- ຄວາມໄວ້ວາງໃຈກ່ຽວຂ້ອງໃກ້ຊິດກັບຄວາມເຊື່ອ.
  ຖ້າເຮົາໄວ້ວາງໃຈໃຜຈັກຄົນ,ເຮົາກໍມີຄວາມເຊື່ອໃນບຸກຄົນນັ້ນເພື່ອເຮັດຕາມທີ່ພວກເຂົາສັນຍາຈະເຮັດ.
- ການມີຄວາມໄວ້ວາງໃຈບາງຄົນໝາຍຄວາມວ່າຂຶ້ນຢູ່ກັບບຸກຄົນນັ້ນເຊັ່ນກັນ.
- "ເຊື່ອໝັ້ນໃນ"
  ພຣະເຢຊູໝາຍຄວາມວ່າເຊື່ອວ່າພຣະອົງຊົງເປັນພຣະເຈົ້າແລະຊົງສິ້ນພຣະຊົນເທິງໄມ້ກາງແຂນເພື່ອຊຳລະບາບຂອງເຮົາແລະເພິ່ງພາພຣະອົງເພື່ອຊ່ວຍເ
- "ຄຳເວົ້າທີ່ໜ້າເຊື່ອຖື" ຍ້ອງເຖິງບາງສິ່ງບາງຢ່າງທີ່ໄດ້ກ່າວໄດ້ວ່າສາມາດນັບໄດ້ວ່າເປັນຄວາມຈິງ.

### ຄຳແນະນຳໃນການແປ

- ວິທີການແປຄຳວ່າ "ໄວ້ວາງໃຈ" ສາມາດລວມເຖິງ "ເຊື່ອ" ຫລື "ມີຄວາມເຊື່ອ" ຫລື "ມີຄວາມເຊື່ອໝັ້ນ" ຫລື "ຂຶ້ນຢູ່ກັບ."
- ວະລີທີ່ວ່າ "ທ່ານໄວ້ວາງໃຈໃນ" ມີຄວາມຄ້າຍຄືກັນຫລາຍໃນຄວາມໝາຍຂອງ "ໄວ້ວາງໃຈ."
- ຄຳວ່າ "ເຊື່ອຖືໄດ້" ສາມາດແປເປັນ "ວາງໃຈໄດ້" ຫລື "ໜ້າໄວ້ວາງໃຈ" ຫລື "ສາມາດເຊື່ອຖືໄດ້ສະເໝີ."

## ໄຮ້ສາລະ, ຄວາມໄຮ້ສາລະ

### ນິຍາມ

ຄຳວ່າ "ໄຮ້ສາລະ" ອະທິບາຍເຖິງສິ່ງບໍ່ມີປະໂຫຍດ ຫລືບໍ່ມີວັດຖຸປະສົງ. ສິ່ງໄຮ້ສາລະວ່າງເປົ່າແລະບໍ່ມີຄຸນຄ່າ.

- ຄຳວ່າ "ຄວາມໄຮ້ສາລະ" ຍ້ອງເຖິງຄວາມໄຮ້ຄ່າຫລືຄວາມວ່າງເປົ່າ. ນອກຈາກນີ້ຍັງສາມາດຍ້ອງອີງເຖິງຄວາມຈອງຫອງ ຫລືຫຍິ່ງຜະຫຍອງ.
- ໃນພັນທະສັນຍາເດີມ, ຮູບເຄົາລົບໄດ້ຮັບການອະທິບາຍວ່າເປັນສິ່ງໄຮ້ສາລະທີ່ບໍ່ສາມາດຊ່ວຍເຫລືອ ຫລືຊ່ວຍໃຫ້ພົ້ນໄດ້. ພວກມັນບໍ່ມີຄ່າແລະບໍ່ມີປະໂຫຍດ ຫລືມີວັດຖຸປະສົງໃດໆ.
- ຫາກມີການກະທຳສິ່ງໃດໆໂດຍ "ໄຮ້ປະໂຫຍດ" ໝາຍຄວາມວ່າບໍ່ມີຜົນດີຈາກສິ່ງນີ. ຄວາມພະຍາຍາມຫລືການກະທຳບໍ່ບັນລຸຜົນອັນໃດ.
- "ເຊື່ອໃນສິ່ງທີ່ໄຮ້ສາລະ" ໝາຍຄວາມວ່າເຊື່ອໃນບາງສິ່ງທີ່ບໍ່ມຈິງ ແລະໃຫ້ຄວາມຫວັງທີ່ຜິດໆ.

## ໜາມ, ຕົ້ນໄມ້ໜາມ

### ນິຍາມ

ຕົ້ນໄມ້ທີ່ມີໜາມ ແລະ ໜາມ ແມ່ນຕົ້ນໄມ້ທີ່ມີງ່າແລະດອກໄມ້ທີ່ງອກງາມ. ພືດເຫລົ່ານີ້ບໍ່ໄດ້ອອກໝາກ ແລະສິ່ງອື່ນໆທີ່ເປັນປະໂຫຍດ.

- "ໜາມ" ເປັນສິ່ງແຂງຄົມ ທີ່ເກີດເທິງກິ່ງຫຼືຕົ້ນຂອງຕົ້ນໄມ້ "ຕົ້ນໄມ້ທີ່ມີໜາມ" ເປັນຕົ້ນໄມ້ຂະນາດນ້ອຍຊະນິດໜຶ່ງຫຼືໄມ້ພຸ່ມທີ່ມີໜາມຫລາຍຕາມກິ່ງກ້ານຂອງມັນ.
- "ພືດໜາມ" ເປັນພືດທີ່ລຳຕົ້ນແລະໃບເຕັ້ມໄປດ້ວຍໜາມ ດອກມັກຈະເປັນສີ່ມ່ວງ.
- ໜາມແລະຕົ້ນໜາມເປັນພືດທີ່ຈະເລີນເຕີບໂຕຢ່າງໄວວາແລະເປັນເຫດບໍ່ສາມາດໃຫ້ພືດອື່ນໆຈະເລີນເຕີບໂຕໄດ້. ນີ້ເປັນພາບທີ່ສະແດງໃຫ້ເຫັນວ່າບາບຈະປິດກັ້ນບໍ່ໃຫ້ຜູ້ເຊື່ອເກີດຜົນທາງຈິດວິນຍານທີ່ດີ.
- ມຸງກຸດທີ່ເຮັດຈາກໜາມແຫລມບິດເປັນກ່ຽວທີ່ສວມເທິງຫົວຂອງພຣະເຢຊູກ່ອນທີ່ພຣະອົງຈະຖືກຕອກຄຶງເທິງໄມ້ກາງແຂນ.
- ຖ້າເປັນໄປໄດ້ຄຳເຫລົ່ານີ້ຄວນແປໂດຍຊື່ຂອງພືດສອງຊະນິດທີ່ແຕກຕ່າງກັນຫລືພຸ່ມໄມ້ທີ່ເປັນທີ່ຮູ້ຈັກໃນພາສາທ້ອງຖິ່ນ.


generated on Thu Jul 10 08:45:04 2025

## ໜ້າ, ໃບໜ້າ

### ນິຍາມ

ຄຳວ່າ "ໃບໜ້າ" ຕາມຕົວອັກສອນກໍໝາຍເຖິງສ່ວນນຶ່ງຂອງຫົວ ຂອງຄົນເຮົາ. ຄຳນີ້ມີຄວາມໝາຍໃນທາງປຽບທຽບຫລາຍຢ່າງ.

- ຄຳວ່າ "ໜ້າຂອງທ່ານ" ຫລາຍໆ ເທື່ອທີ່ໃຊ້ໃນການເວົ້າປຽບ ທຽບ ຊຶ່ງຈະເວົ້າວ່າ "ທ່ານ." ຄ້າຍກັບຖ້ອຍຄຳທີ່ວ່າ "ໜ້າຂອງຂ້າພຣະເຈົ້າ" ຫລາຍເທື່ອກໍເວົ້າເຖິງ "ເຮົາ"(ເປັນປະທານ) ຫລື "ເຮົາ"(ເປັນກຳ).
- ໃນດ້ານຮ່າງກາຍ, "ຕໍໜ້າ" ບາງຄົນຫລືບາງສິ່ງໝາຍເຖິງການ ເບິ່ງໄປທີ່ຄົນນັ້ນ ຫລືຂອງສິ່ງນັ້ນ.
- ການ "ຜະເຊີນໜ້າກັນ" ໝາຍເຖິງ "ການເບິ່ງໜ້າກັນແລະກັນ."
- ການເບິ່ງ "ໜ້າຕໍ່ໜ້າ" ໝາຍຄວາມວ່າສອງຄົນກຳລັງເບິ່ງໜ້າ ກັນໃນໄລຍະໃກ້.
- ເມື່ອພຣະເຢຊູ "ພຣະອົງຫັນໜ້າໄປຍັງກຸງເຢຣູຊາເລັມ," ໝາຍ ເຖິງວ່າພຣະອົງຕັ້ງໃຈຢ່າງແນ່ນອນວ່າພຣະອົງຈະໄປທີ່ນັ້ນ.
- ຈະ "ມຸ່ງໜ້າຕໍ່ຕ້ານ" ຜູ້ຄົນຫລືເມືອງ ໝາຍເຖິງການຕັດສິນໃຈແນ້ວແນ່ທີ່ຈະບໍ່ສະໜັບສະໜຸນ ຫລືປະຕິເສດຄົນຫລືເມືອງ ນັ້ນໆ.
- ຖ້ອຍຄຳທີ່ວ່າ "ພື້ນໜ້າຂອງແຜ່ນດິນ" ເວົ້າເຖິງພື້ນດິນຂອງໂລກແລະໂດຍທົ່ວໄປມັກຈະເວົ້າເຖິງໂລກທັງໜ່ວຍ. ຕົວຢ່າງເຊັ່ນ, "ຄວາມອຶດຢາກປົກຄຸມພື້ນແຜ່ນດິນໂລກ" ເວົ້າເຖິງການແຜ່ກະຈາຍຂອງຄວາມອຶດຢາກທີ່ສົ່ງຜົນກະທົບຕໍ່ມະນຸດຈຳນວນຫລາຍ ທີ່ມີຊີວິດຢູ່ເທິງໂລກນີ້.
- ໃນການປຽນທຽນ, "ຢ່າເຊື່ອງໜ້າຂອງພຣະອົງຈາກປະຊາກອນ ຂອງພຣະອົງ" ຫລື "ຢ່າປະຖິ້ມປະຊາກອນຂອງພຣະອົງ" ຫລື "ຢ່າ ຢຸດດູແລປະຊາກອນຂອງພຣະອົງ."

### ຄຳແນະນຳການແປ

- ຖ້າເປັນໄປໄດ້, ເປັນການທີ່ດີສຸດໃຫ້ຮັກສາຖ້ອຍຄຳ ຫລືໃຊ້ຖ້ອຍຄຳພາສາທີ່ຈະແປໃຫ້ມີຄວາມໝາຍທີ່ຄ້າຍຄືກັນ.
- ຄຳວ່າ "ຕໍໜ້າ" ສາມາດແປໄດ້ວ່າ "ຫັນໄປ" ຫລື "ເບິ່ງຊື່ໄປ" ຫລື "ເບິ່ງໄປທີ່ໜ້າຂອງ."

ຄຳວ່າ "ໜ້າຕໍ່ໜ້າ" ສາມາດແປໄດ້ວ່າ "ຂຶ້ນໄປໃກ້" ຫລື "ຢູ່ຕໍ່ໜ້າຂອງ" ຫລື "ການຢູ່ຕໍ່ໜ້າຂອງ."

- ຄຳວ່າ "ຕໍໜ້າພຣະອົງ" ສາມາດແປໄດ້ວ່າ "ທາງໜ້າພຣະອົງ" ຫລື "ເບື້ອງໜ້າພຣະອົງ" ຫລື "ໜ້າພຣະອົງ" ຫລື "ໃນການຊົງປະທັບຢູ່."
- ຖ້ອຍຄຳທີ່ວ່າ "ຫັນໜ້າພຣະອົງໄປຍັງ" ສາມາດແປໄດ້ວ່າ "ໄດ້ເລີ່ມເດີນທາງໄປຍັງ" ຫລື "ຕັ້ງໃຈຢ່າງແນ້ວແນ່ທີ່ຈະໄປຍັງ."
- ຖ້ອຍຄຳທີ່ວ່າ "ເຊື່ອງໜ້າພຣະອົງຈາກ" ສາມາດແປໄດ້ວ່າ "ຫັນ ໄປຈາກ" ຫລື "ຢຸດການຊ່ອຍເຫລືອ ຫລືການປົກປ້ອງຮັກສາ" ຫລື "ປະຕິເສດ."
- ທີ່ວ່າ "ຕັ້ງໜ້າຕໍ່ສູ້" ເມືອງຫລືປະຊາຊົນ ສາມາດແປໄດ້ວ່າ "ເບິ່ງ ດ້ວຍຄວາມໂກດຮ້າຍ ແລະຕຳນິ" ຫລື "ປະຕິເສດທີ່ຈະຮັບ" ຫລື "ຕັດສິນໃຈທີ່ຈະປະຖິ້ມ" ຫລື "ນຳການພິພາກສາມາສູ່."
- ຖ້ອຍຄຳທີ່ວ່າ, "ຈົ່ງເວົ້າຕໍ່ໜ້າພວກເຮົາ" ສາມາດແປໄດ້ວ່າ "ຈົ່ງເວົ້າກັບເຂົາຢ່າງກົງໄປກົງມາ" ຫລື "ຈົ່ງເວົ້າໃນຂະນະທີ່ພວກເຂົາ ຍັງຢູ່" ຫລື "ຈົ່ງເວົ້າກັບເຂົາຕົວຕໍ່ຕົວ."
- ຖ້ອຍຄຳທີ່ວ່າ, "ເທິງພື້ນໜ້າຂອງແຜ່ນດິນ" ສາມາດແປໄດ້ວ່າ "ຕະຫລອດທັ່ງແຜ່ນດິນ" ຫລື "ເທິງແຜ່ນດິນໂລກທັ່ງໝົດ" ຫລື "ອາໃສຢູ່ທົ່ວແຜ່ນດິນໂລກ."

## ໜ້າຍົກຍ້ອງ, ຄຸ້ມຄ່າ, ບໍ່ຄູ່ຄວນ, ບໍ່ມີຄຸນຄ່າ

### ນິຍາມ

ຄຳເວົ້າວ່າ "ໜ້າຍົກຍ້ອງ" ໄດ້ອະທິບາຍເຖິງບາງຄົນຫຼືບາງສິ່ງທີ່ສົມຄວນໄດ້ຮັບການເຄົາລົບຫຼືໃຫ້ກຽດ ການ "ມີຄຸນຄ່າ" ໝາຍເຖິງການມີຄຸນຄ່າຫຼືຄວາມສຳຄັນ ຄຳວ່າ "ບໍ່ມີຄຸນຄ່າ" ໝາຍເຖິງບໍ່ມີຄ່າໃດໆ ເລີຍ.

- ການໜ້າຍົກຍ້ອງ ກ່ຽວຂ້ອງກັບການມີຄຸນຄ່າຫລືມີຄວາມສຳຄັນ.
- ການ "ບໍ່ຄູ່ຄວນ" ໝາຍເຖິງບໍ່ສົມຄວນໄດ້ຮັບການແຈ້ງພິເສດອັນໃດ.
- ບໍ່ຮູ້ສຶກວ່າໜ້າຍົກຍ້ອງໝາຍເຖິງ ຮູ້ສຶກດ້ວຍຄວາມສຳຄັນວ່າຜູ້ອື່ນຫຼືຮູ້ສຶກບໍ່ສົມຄວນທີ່ຈະໄດ້ຮັບການປະຕິບັດດ້ວຍຄວາມເຄົາລົບຫຼືຄວາມເມດຕາ.
- ຄຳເວົ້າວ່າ "ບໍ່ຄູ່ຄວນ" ແລະຄຳວ່າ "ບໍ່ມີຄຸນຄ່າ" ມີຄວາມກ່ຽວຂ້ອງ ແຕ່ມີຄວາມໝາຍຕ່າງກັນ ການ "ບໍ່ຄູ່ຄວນ" ໝາຍເຖິງບໍ່ສົມຄວນໄດ້ຮັບກຽດຫຼືການຮັບຮູ້ໃນການໃດໆ ສ່ວນ "ບໍ່ມີຄຸນຄ່າ" ໝາຍເຖິງບໍ່ມີຈຸດມຸ້ງໝາຍຫຼືຄຸນຄ່າໃດໆ.

### ຄຳແນະນຳໃນການແປ:

- "ໜ້າຍົກຍ້ອງ" ໝາຍຄວາມວ່າ "ສົມຄວນໄດ້ຮັບ" ຫຼື "ສຳຄັນ" ຫຼື "ມີຄຸນຄ່າ."


generated on Thu Jul 10 08:45:04 2025

- ຄຳເວົ້າວ່າ "ຄຸ້ມຄ່າ" ໝາຍຄວາມວ່າ "ມີຄ່າ" ຫຼື "ຄວາມສຳຄັນ."

## ໜ້າທະນູ ແລະ ລູກສອນ

### ນິຍາມ

ນີ້ແມ່ນອາວຸດປະເພດໜຶ່ງ ເຊິ່ງປະກອບດ້ວຍລູກສອນຍິງຈາກລູກກະແຈ. ໃນສະໄໝທີ່ຂຽນພຣະຄຳພີ
ມັນໃຊ້ສຳລັບການຕໍ່ສູ້ກັບສັດຕູແລະການຂ້າສັດເພື່ອເປັນອາຫານ

- ໜ້າທະນູແມ່ນເຮັດດ້ວຍໄມ້, ກະດູກ, ໂລຫະ, ຫລືວັດຖຸແຂງອື່ນໆ, ເຊັ່ນ: ເຄື່ອງປ້ອງກັນຂອງກວາງ.
  ມັນມີຮູບຊົງໂຄ້ງແລະຖືກຍຶດແໜ້ນດ້ວຍເຊືອກ, ສາຍ, ຫລືເຄືອ.
- ລູກສອນແມ່ນຮູບຊົງບາງໆທີ່ມີຫົວແຫຼມແລະແຫຼມຢູ່ສົ້ນ ໜຶ່ງ. ໃນສະໄໝບູຮານ, ລູກສອນສາມາດເຮັດດ້ວຍວັດຖຸຕ່າງໆເຊັ່ນ: ໄມ້,
  ກະດູກ, ຫີນ, ຫລືໂລຫະ.
- ໜ້າທະນູ ແລະ ລູກສອນຖືກໃຊ້ຫົວໄປໂດຍນາຍພານ ແລະ ນັກ ຣົບ.
- ຄຳວ່າ“ ລູກສອນ” ບາງຄັ້ງຍັງຖືກໃຊ້ໃນຕົວເລກໃນພຣະຄຳພີເພື່ອກ່າວເຖິງການໂຈມຕີຂອງສັດຕູຫລືການພິພາກສາຈາກສະຫວັນ.

## ໜັງສືມ້ວນ

### ນິຍາມ

ໃນສະໄໝບູຮານ ໜັງສືມ້ວນແມ່ນປຶ້ມປະເພດ ໜຶ່ງ ທີ່ເຮັດດ້ວຍແຜ່ນລວດລາຍຫລືແຜ່ນ ໜັງ

- ຫັລງຈາກຂຽນໃສ່ແຜ່ນ ໜັງສື ສຳເລັດ ປະຊາຊົນຈະເກັບໃວ້ໂດຍໃຊ້ເຊືອກຜູກໃວ້
- ໜັງສືມ້ວນ ຍັງເປັນໜັງສື ທາງກົດໝາຍ ແລະທາງພຣະຄຳພີ
- ບາງເທື່ອ ໜັງສືມ້ວນ ທີ່ຖືກສົ່ງໂດຍຜູ້ສົ່ງຂ່າວສານໄດ້ຖືກປະທັບຕາດ້ວຍຂີ້ເຜິ້ງ. ນີ້ຈະປ້ອງກັນບໍ່ໃຫ້ຜູ້ອື່ນເປີດປຶ້ມແລະຂຽນໃສ່ໄດ້.
- ໜັງສືມ້ວນ ທີ່ຂຽນດ້ວຍພຣະຄຳພີ ພາກພາສາເຮັບເລີໄດ້ຖືກອ່ານດັ່ງໆຢູ່ໃນທຳມະສາລາ.

## ໝາກກອກ

### ນິຍາມ

ໝາກກອກ ເປັນຫມາກໄມ້ ຂະໜາດນ້ອຍ ຮູບໄຂ່ຈາກຕົ້ນ ຫມາກກອກ, ຊຶ່ງສ່ວນໃຫຍ່ ປູກໃນແຖບອ້ອມຮອບ ທະເລເມດິເຕຣາເນ.

- ຕົ້ນໝາກກອກ ມີລັກສະນະ ເປັນໄມ້ພຸ່ມ ຂະໜາດໃຫຍ່ທີ່ໃບຂຽວ ຕະຫລອດປີ ອອກດອກສີຂາວນ້ອຍໆ. ສາມາດເຕີບໂຕໄດ້ດີ
  ໃນພື້ນທີ່ໆມີອາກາດຮ້ອນ ແລະສາມາດ ຂຶ້ນໄດ້ດີດ້ວຍນ້ຳຫລ່ລ້ຽງ ພຽງນ້ອຍໆ.
- ຫມາກກອກ ຈະມີສີຂຽວ, ເມື່ອຫມາກສຸກ ຈະກາຍເປັນສີດຳ. ສາມາດນຳຫມາກກອກ ໄປກິນ ຫລືສະກັດເປັນນ້ຳມັນໄດ້.
- ສາມາດໃຊ້ນ້ຳມັນໝາກກອກ ສຳຫລັບເຮັດອາຫານ, ເປັນເຊື້ອໄຟ ຂອງຕະກຽງ, ແລະໃຊ້ເປັນສ່ວນປະກອບ ໃນພິທີທາງສາສນາໄດ້.
- ໃນພຣະຄັມພີນັ້ນ, ບາງເທື່ອຈະມີການໃຊ້ຕົ້ນຫລືກິ່ງຫມາກກອກ ໃນຄຳອຸບປະມາ ທີ່ອ້າງເຖິງປະຊາຊົນ.

## ໝາກທຳອິດ

### ນິຍາມ

ຄຳວ່າ "ໝາກທຳອິດ" ກ່າວເຖິງສ່ວນທຳອິດຂອງພືດຜົນລະໄມ້ແລະຜັກທີ່ຖືກເກັບກ່ຽວໃນລະຫ່ວາງລະດູການເກັບກ່ຽວແຕ່ລະຄັ້ງ.

- ຊົນຊາດອິສະຣາເອນຖວາຍໝາກທຳອິດເຫຼົ່ານີ້ເພື່ອເປັນເຄື່ອງຖວາຍບູຊາ.
- ຄຳນີ້ຍັງໃຊ້ເປັນຄຳປຽບທຽບໃນພຣະຄັມພີເປັນການກ່າວເຖິງບຸດຊາຍຫົວປີທີ່ໄດ້ເກີດມາເປັນໝາກທຳອິດຂອງຄອບຄົວ.
  ນັ້ນກໍເພາະວ່າເຂົາເປັນບຸດຊາຍທີ່ເກີດມາໃນຄອບຄົວຄົນທຳອິດ, ເຂົາຈະເປັນຄົນທີ່ສືບທອດຊື່ຕະກູນຂອງຄອບຄົວແລະກຽດຕິຍົດ.
- ເພາະວ່າພຣະເຢຊູຊົງໄດ້ເປັນຂຶ້ນມາຈາກຄວາມຕາຍ, ພຣະອົງຊົງຖືກຮຽກວ່າເປັນ "ໝາກທຳອິດ"
  ແກ່ຜູ້ສັດທາທຸກຄົນທີ່ເຊື່ອໃນພຣະອົງວ່າຜູ້ທີ່ໄດ້ຕາຍໄປແລ້ວແຕ່ວັນນຶ່ງຈະກັບເປັນຂຶ້ນມາມີຊີວິດ.
- ຜູ້ສັດທາທັ້ງຫຼາຍໃນພຣະເຢຊູຍັງຖືກຮຽກວ່າເປັນ "ໝາກທຳອິດ" ທ່ານກາງສິ່ງຊົງສ້າງທັ້ງຫຼາຍ,
  ສຳແດງໃຫ້ເຫັນເຖິງສິດທິພິເສດແລະຕຳແໜ່ງຂອງຄົນເຫຼົ່ານັ້ນທີ່ພຣະເຢຊູຊົງໄດ້ໄຖ່ແລະຮຽກເອີ້ນໃຫ້ມາເປັນປະຊາກອນຂອງພຣະອົງ.


generated on Thu Jul 10 08:45:04 2025

**ຄຳແນະນຳການແປ**

- ການໃຊ້ຕາມຕົວອັກສອນຂອງຄຳນີ້ສາມາດແປໄດ້ອີກວ່າ "ສ່ວນທຳອິດ".

## ໝາກພິລາ

### ນິຍາມ

ໝາກພິລາເປັນໝາກໄມ້ຊະນິດໜຶ່ງທີ່ມີເປືອກໜາແລະແຂງເຊິ່ງເຕັມໄປດ້ວຍເມັດຈຳນວນຫລາຍທີ່ຖືກຫຸ້ມດ້ວຍເຫຍື່ອສີແດງທີ່ສາມາດກິນໄດ້

- ເປືອກນອກມີສີແດງແລະຊີນອ້ອມເມັດທີ່ເປັ່ງປະກາຍແລະສີແດງ
- ໝາກພິລາມັກຈະເລີນເຕີບໂຕຫລາຍໃນປະເທດທີ່ມີອາກາດຮ້ອນ ອາກາດແຫ້ງ ເຊັ່ນປະເທດເອຢິປແລະອິດສະລາເອນ
- ພຣະຢາເວ ພຣະອົງຊົງສັນຍາກັບຊາວອິດສະລາເອນ ວ່າການາອານເປັນແຜ່ນດິນທີ່ມີນ້ຳອຸດົມສົມບູນ ແລະມີດິນອຸດົມສົມບູນເພື່ອຈະໃຫ້ມີອາຫານຫລວງຫລາຍທັ້ງໝົດເຖິງໝາກທັບທິມ
- ການກໍ່ສ້າງວິຫານຂອງຊາໂລມ ທັ້ງຫມົດເຖິງເຄື່ອງປະດັບຫອງສັ້ມລິດໃນຮູບຮ່າງຂອງ$ໝາກພິລາ

## ໝາກເດື່ອ

### ນິຍາມ

ໝາກເດື່ອເປັນໝາກໄມ້ໜ່ວຍນ້ອຍໆ, ນຸ້ມ ມີລົດຫວານຊຶ່ງເປັນໝາກຈາກຕົ້ນໝາກເດື່ອ. ເມື່ອໝາກສຸກ ໝາກນີ້ມີຫຼາຍສີ, ລວມທັ້ງສີນ້ຳຕານ, ສີເຫຼືອງ, ຫຼືສີມ່ວງ.

- ຕົ້ນໝາກເດື່ອສາມາດໃຫຍ່ໄດ້ສູງເຖິງ 6 ແມັດແລະໃບທີ່ໃຫຍ່ຂອງຕົ້ນໝາກເດື່ອກໍຍັງໃຫ້ຮົ່ມເງົາທີ່ດີ. ໝາກເດື່ອຍາວປະມານ 3-5 ຊັ່ງຕີແມັດ.
- ອາດາມແລະເອວາໄດ້ໃຊ້ໃບໝາກເດື່ອທຳເປັນເຄື່ອງນຸ່ງຫົ່ມສຳລັບພວກເຂົາຫຼັງຈາກພວກເຂົາໄດ້ທຳບາບ.
- ໝາກເດື່ອ ສາມາດຮັບປະທານສົດ, ຫຼືທຳອາຫານ,ຫຼືເຮັດໃຫ້ແຫ້ງ.ຄົນສາມາດຫັ່ນເປັນຕ່ອນນ້ອຍໆ ເຮັດເປັນເຂົ້າໜົມເຄ້ັກເພື່ອຮັບປະທານໃນພາຍຫຼັງ.
- ໄລຍະເວລາໃນພຣະຄັມພີ, ໝາກເດື່ອເປັນສິນຄ້າສົ່ງອອກ ເປັນແຫຼ່ງອາຫານແລະລາຍໄດ້ທີ່ສຳຄັນ.
- ພຣະຄັມພີເວົ້າເຖິງຕົ້ນໝາກເດື່ອທີ່ເກີດໝາກຫຼາຍໆຄັ້ງໃນຮູບແບບທີ່ເປັນໝາຍສຳຄັນຂອງຄວາມຮຸ່ງເຮືອງ.

## ໝາກເຫັບ

### ນິຍາມ

ຄຳນີ້ອ້າງເຖິງນ້ຳທີ່ແຂງຕົວເປັນກ້ອນນ້ອຍຫລືກ້ອນໃຫຍ່ທີ່ຕົກລົງມາຈາກທ້ອງຟ້າ. ຄຳທີ່ຕ່າງກັນ, "ໝາກເຫັບ" ໃຊ້ໃນການທັກທາຍກັບຄົນບາງຄົນ ແລະສາມາດໃຫ້ຄວາມວ່າ "ຣາໂລ" ຫລື "ສະບາຍດີ".

- ໝາກເຫັບທີ່ຕົກລົງມາຈາກທ້ອງຟ້າເປັນຮູບແບບລູກກົມໆ ຫລື ກ້ອນນ້ຳແຂງທີ່ເອີ້ນວ່າ "ກ້ອນໝາກເຫັບ."
- ໂດຍປົກກະຕິໝາກເຫັບຈະມີຂະໜາດນ້ອຍໆ (ກວ້າງບໍ່ເທົ່າໃດຊັ່ງຕີແມັດ), ແຕ່ກໍຍັງມີໝາກເຫັບກ້ອນທີ່ໃຫຍ່ມີຂະໜາດກ້ວາງເຖິງ 20 ຊັ່ງຕີແມັດແລະມີນ້ຳໜັກຫລາຍກວ່າໜຶ່ງກິໂລ ກຣາມ.
- ພຣະທຳພຣະນິມິດໃນພັນທະສັນຍາໃໝ່ໄດ້ອະທິບາຍເຖິງກ້ອນໝາກເຫັບຂະໜາດໃຫຍ່ທີ່ໜັກ 50 ກິໂລກຣາມທີ່ພຣະເຈົ້າເຮັດໃຫ້ຕົກລົງມາໃນໂລກເມື່ອພຣະອົງຜິພາກສາປະຊາຊົນສຳລັບຄວາມຊົ່ວຊ້ຳຂອງພວກເຂົາໃນຊ່ວງເວລາສຸດທ້າຍ.
- ຄຳວ່າ "ໝາກເຫັບ" ຫລື "ເຮລ" ເປັນຄຳທັກທາຍໃນພາສາອັງກິດແບບເກົ່າ ຕາມຕົວອັກສອນໝາຍຄວາມວ່າ "ຍິນດີ" ແລະສາມາດແປວ່າ "ທັກທາຍ" ຫລື ເຮໂລ.

## ໝາປ່າ, ຝູງໝາປ່າ, ໝາປ່າ

### ນິຍາມ

ໝາປ່າເປັນສັດດຸຮ້າຍ ສັດກິນເນື້ອທີ່ຄ້າຍຄືກັນກັບໝາປ່າ.

- ໝາປ່າໂດຍປົກກະຕິມັກລ້າເປັນຝູງແລະອຳພາງຕົວຢ່າງສະຫຼາດເມື່ອເຂົ້າຫາເຫຍື່ອກິນຂອງພວກມັນແລະມີພຶດຕິກັມຂີ້ຂະໂມຍ.


generated on Thu Jul 10 08:45:04 2025

- ໃນພຣະຄຳພີ ມີຄຳສັບທີ່ວ່າ "ຝູງໝາປ່າ" ໃຊ້ໃຫ້ເຫັນພາບເມື່ອໝາຍເຖິງຄູສອນທີ່ແທ້ຈິງຫຼືຜູ້ປະກາດພຣະທຳປອມ ຜູ້ທີ່ທຳລາຍຜູ້ທີ່ເຊື່ອທັ້ງຫຼາຍທີ່ປຽບເໝືອນລູກແກະ ການສອນທີ່ຜິດໆ ເປັນສາຍເຫດໃຫ້ປະຊາຊົນເຊື່ອໃນສິ່ງທີ່ຜິດທີ່ນຳອັນຕະລາຍມາສູ່ພວກເຂົາ.
- ການປຽບທຽບນີ້ຢູ່ໃນພື້ນຖານຂອງຄວາມຈິງທີ່ວ່າຝູງແກະນັ້ນອ່ອນແອມັກທີ່ຈະຖືກທຳລາຍແລະຖືກກັດກິນໂດຍຝູງໝາປ່າ ເພາະວ່າພວກມັນອ່ອນແອແລະບໍ່ສາມາດປົກປ້ອງຕົວເອງໄດ້ເລີຍ.

## ໝີ

### ນິຍາມ

ໝີແມ່ນສັດມີຂົນຂະໜາດໃຫຍ່ມີສີຂາມີຂົນສີນ້ ຳຕານເຂັ້ມຫລືສີດຳ, ມີແຂ້ວແລະຮອຍເລັບແຫຼມ. ໝີມີຢູ່ໃນປະເທດອິດສະລາແອນໃນສະ ໄໝພຣະຄຳພີ.

- ສັດເຫຼົ້ານີ້ອາໄສຢູ່ໃນປ່າແລະເຂດພູດອຍ; ພວກເຂົາກິນປາ, ແມງໄມ້ແລະຜືດ.
- ໃນສັນຍາເກົ່າ, ໝີຖືກໃຊ້ເປັນສັນຍາລັກຂອງກຳລັງແຮງ.
- ໃນຂະນະທີ່ລ້ຽງແກະ, ດາວິດຜູ້ລ້ຽງແກະໄດ້ຕໍ່ສູ້ກັບໝີ ແລະເອົາຊະນະມັນ.
- ໝີສອງໂຕໄດ້ອອກມາຈາກປ່າແລະໂຈມຕີກຸ່ມໄວໜຸ່ມທີ່ໄດ້ເຍາะเย้ยຜູ້ເຜີຍພຣະຄຳເອລີຊາ.

## ໝູ , ໝູເປะเปื้อน , ຊີ້ນໝູ

### ນິຍາມ

ໝູເປັນສັດສີຂາ ຕີນມີກີບ ລ້ຽງໄວ້ເພື່ອໃຊ້ຊີ້ນເປັນອາຫານ ສ່ວນຊີ້ນທີ່ໄດ້ຈາກສຸກອນຫລືໝູນັ້ນເອີ້ນວ່າ "ຊີ້ນໝູ" ຄຳທົ່ວໄປທີ່ໃຊ້ເອີ້ນສັດຊະນິດນີ້ຄື "ໝູ"

- ພຣະເຈົ້າໄດ້ຊົງບອກຊາວອິດສະລາເອນບໍ່ໃຫ້ຮັບປะทานຊີ້ນໝູແລະເບິ່ງໝູວ່າບໍ່ສะอาด ปะจุบันชาวยิวยังคงเห็นว่าหมูนั้นเป็นสัตที่เปะเปื้อนและยังคงบ่กินชี้นหมู
- ໝູຖືກລ້ຽງໃນຟາມເພື່ອຂາຍໃຫ້ປะชาชีนคืนสีนสำลับชี้นของมัน
- ມີໝູອີກປะเผดໝຶ່ງເຊິ່ງບໍ່ໄດ້ຖືກລ້ຽງໃນຟາມແຕ່ມີຊີວິດໃນປ່າ ສັດຊะนิดนีเอีนว่า "ໝูป่า" ໝูป่ามีแຂ้วแหลมและถืกผิจาละนาว่าเป็นสัดที่อันตะลาย
- ບางเทือหมูที่มีตัวใหย่จะฮ้างอิงว่า "หมูตอน"

## ຄວາມຕາຍ, ຕາຍ, ຄົນຕາຍ

### ນິຍາມ

ຄຳນີ ໃຊ້ເພື່ອ ອ້າງເຖິງຄວາມຕາຍ ທາງຮ່າງກາຍ ແລະທາງວິນຍານ ທາງຮ່າງກາຍ ເປັນການເວົ້າເຖິງ ເມືອຮ່າງກາຍຂອງຄົນຕາຍແລ້ວ ແຕ່ ທາງວິນຍານເປັນການກ່າວເຖິງຄົນບາບ ທີ່ຖືກແຍກ ຈາກພຣະເຈົ້າຜູ້ບໍຣິສຸດ ເພາะบาบของพวกเข็า.

### ຄຳແນะนำในการแป

- ใน การแปลคำนี ควนใช้คำ หลิ ยิดถวาม ที่เป็นคำที่ใช้ในชีวิดปะจำวัน ที่เป็นท้ามะชาด หลิคำที่มีถวามหมายว่าตาย ใน ผาสาที่แป.
- ใน บางผาสา, "ตาย" อาดสะแดงเป้น " บ่มีชีวิด" หลิ ตายแล้ว.
- หลาย ผาสา ใช้ การปรียบหรับ ในการอะทิบาย เถิงถวามตายเช้น, "จากไปแล้ว" ในผาสาอังกิด. ย่างใดก็ตาม ในพระ คัมผี ที่ดีที่สุด ถือการใช้ คำที่ถูกต้องที่สุดสำหลับ ถวามตาย ที่ใช้ในผาสา ปะจำวัน.
- ในพระคำผี ชีวิดฝ่ายร่างกาย และถวามตาย มักถูกปรียบหรับ กับชีวิด และถวามตาย ฝ่ายวินยาน เป้นสิ่งสำคัน ใน การแป เพื่อ ใช้คำ หลิ ยิดถวามดวิจ สำหลับถวามตาย ทางร่างกาย และถวามตายฝ่ายวินยาน.
- ใน บาง ผาสา อาจเว็าได้ ชัดเจนว่า " ถวามตายทางวินยาน"เมื่อบ่ลี่ยิด ต้องการแปลถวามหมายนั้น นักแปลบางคนอาด รู้สึก ว่า เป้นการดีที่สุด ที่จะเว็าว่า "ถวามตายฝ่ายร่างกาย" ในบ่ยิดที่ก็งกันข้าม กับถวามตาย ฝ่ายวินยาน.
- คำเว็า " คนตาย" หมายเถิง คนเสียชีวิด ในบางผาสา

จะแปว่า " ผู้ตาย" หลิ "ผู้ที่เสียชีวิด."


generated on Thu Jul 10 08:45:04 2025

## ຊະເລີຍ,ການເປັນຊະເລີຍ

### ນິຍາມ

ຄຳວ່າ "ຊະເລີຍ" ແລະ "ການເປັນຊະເລີຍ" ໝາຍເຖິງການຈັບ ຜູ້ຄົນແລະບັງຄັບພວກເຂົາໃຫ້ໄປຢູ່ໃນທີ່ບາງແຫ່ງທີ່ເຂົາບໍ່ຕ້ອງການທີ່ຈະໄປຢູ່ອາໃສຢ່າງ ເຊັ່ນໃນຕ່າງປະເທດ.

- ຄົນອິສຣາເອນຈາກອານາຈັກຢູດາຖືກຈັບໄປເປັນຊະເລີຍໃນອານາຈັກບາບີໂລນເປັນເວລາ 70 ປີ.
- ພວກຊະເລີຍ ມັກຖືກໃຊ້ໃຫ້ເຮັດວຽກໃຫ້ກັບຄົນ ຫລືຊົນຊາດທີ່ຈັບພວກເຂົາໄປເປັນຊະເລີຍ
- ດານີເອນແລະເນຮີມີຢາ ເປັນຊະເລີຍຊາວອິສຣາເອນ ທີ່ເຮັດວຽກຮັບໃຊ້ກະສັດບາບີໂລນ.
- ຄຳວ່າ "ຖືກຈັບເປັນຊະເລີຍ" ເປັນການບອກອີກຢ່າງນຶ່ງກ່ຽວກັບການຖືກຈັບໄປເປັນຊະເລີຍ.
- ຄຳວ່າ "ເອົາເຈົ້າໄປເປັນຊະເລີຍ" ສາມາດແປໄດ້ວ່າ"ບັງຄັບໃຫ້ມີຊີວິດຢູ່ແບບຊະເລີຍ" ຫລື ເອົາຕົວທ່ານໄປຫຍັງປະເທດອື່ນໆຄືກັບພວກນັກໂທດ.
- ໃນແງ່ຂອງຄຳປຽບທຽບອັກຄະສາວົກໂປໂລບອກໃຫ້ຄຣິສຕຽນ "ຍຶດໝັ້ນ" ຄວາມຄຶດທຸກຢ່າງໄວ້ ແລະເຮັດໃຫ້ເຊື່ອຟັງພຣະຄຣິດ
- ທ່ານຫຍັງບອກກ່ຽວກັບການທີ່ຄົນຖືກ"ຈັບເປັນຊະເລີຍ"ໂດຍຄວາມບາບຊຶ່ງຫມາຍຄວາມວ່າເຂົາຖືກ"ຄວບຄຸມໂດຍ"ຄວາມບາບ

## ດາຣິອັດ

### ຂໍ້ເທັດຈິງ

ດາຣິອັດ ເປັນ ຊື່ຂອງກະສັດຫລາຍອົງ ຂອງເປີເຊັຍ ເປັນໄປໄດ້ວ່າ" ດາຣິອັດ"ໜ້າຈະເປັນຕຳແໜ່ງ ແທນທີ່ຈະເປັນຊື ' * "ດາຣິອັດເປັນຄົນມີເດັຍ" ເປັນກະສັດທີ່ຖືກຫລອກ ໃນການໃຫ້ໂຍນ ຜູ້ປະກາດພຣະທັມ ດານີເອນ ເຂົ້າໄປໃນຖ້ຳສິງໂຕ ເພື່ອເປັນລົງໂທດ ທີ່ນະມັສະການພຣະເຈົ້າ.

- "ດາຣິອັດ ໄດ້ຊ່ວຍອຳນວຍ ຄວາມສະດວກ ໃນການສ້ອມແຊມພຣະວິຫານ ໃນກຸງເຢຣູຊາເລມ ໃນຊ່ວງເວລາຂອງເອຊຣາຣາແລະເນ ເຫມີຢາ.

## ທານ

### ນິຍາມ

ຄຳວ່າ "ທານ" ເວົ້າເຖິງເງິນ, ອາຫານ, ຫລືສິ່ງອື່ນໆທັ້ງຫລາຍທີ່ໃຫ້ເພື່ອຊ່ວຍເຫລືອຄົນຍາກຈົນ.

- ຫລາຍເທື່ອການໃຫ້ທານມັກຖືກເບິ່ງວ່າເປັນສິ່ງທີ່ສາສນາຂອງພວກເຂົາຕ້ອງການໃຫ້ພວກເຂົາເຮັດ ເພື່ອຈະໄດ້ເປັນຄົນຊອບທັມ.
- ພຣະເຢຊູຊົງໃຫ້ຕັດວ່າ ການໃຫ້ທານບໍ່ຄວນເຮັດຕໍ່ໜ້າຄົນເພື່ອຈະໃຫ້ຄົນອື່ນໄດ້ເຫັນ.
- ຄຳນີ້ອາດແປໄດ້ອີກວ່າ "ເງິນ" ຫລື "ຂອງແຈກຈ່າຍແກ່ຄົນຍາກຈົນ" ຫລື "ການຊ່ວຍເຫລືອສຳລັບຄົນຍາກຈົນ."

## ບາອານ

### ຂໍ້ເທັດຈິງ

"ບາອານ" ໝາຍຄວາມວ່າ "ເຈົ້າ" ຫລື "ນາຍ" ແລະເປັນຊື່ຂອງພະປອມທີ່ຄົນການາອານການາຂບໄຫວ້ນະມັດສະການ.

- ມີພະປອມທ້ອງຖິ່ນທີ່ມີຄຳວ່າ "ບາອານ" ຢູ່ໃນຊື່ຂອງພວກເຂົາດ້ວຍເຊັ່ນ "ບາອານແຫ່ງເປໂອ" ບາງຄັ້ງພວກພະເຫລົ່ານີ້ຖືກເອີ້ນຮ່ວມກັນວ່າ "ບັນດາພະບາອານ."
- ບາງຄົນມີຊື່ທີ່ມີຄຳວ່າ "ບາອານ" ຢູ່ໃນຊື່ຄືກັນ.
- ການນະມັດສະການພະບາອານ ຮວມເຖິງການເຮັດຊົ່ວເຊັ່ນການເອົາເດັກນ້ອຍບູຊາຍັນແລະໃຊ້ຍິງແມ່ຈ້າງມາຮ່ວມພິທີ.
- ຫລາຍເທື່ອໃນປະວັດສາດຂອງພວກເຂົາ, ຄົນອິດສະຣາເອນໄດ້ມີຄວາມສຳພັນໃກ້ຊິດກັບການນະມັດສະການ, ພະບາອານເຮັດຕາມຢ່າງຊົນຊາດທີ່ບໍ່ມີພຣະເຈົ້າຢູ່ອ້ອມແອ້ມພວກເຂົາ.
- ໃນສະໄຫມຂອງກະສັດອາຫາບ, ເອລີຢາຜູ້ປະກາດພຣະທັມຂອງພຣະເຈົ້າໄດ້ທ້າທາຍເພື່ອພິສູດໃຫ້ປະຊາຊົນໄດ້ເຫັນວ່າພະບາອານບໍ່ແມ່ນພະແທ້ ແລະພຣະຢາເວເທົ່ານັ້ນທີ່ເປັນພຣະເຈົ້າອົງຫ່ຽງແທ້ອົງດຽວ. ຜົນປະກົດ ກໍຄືພວກຜູ້ປະກາດຂອງພະບາອານໄດ້ຖືກທຳລາຍແລະປະຊາຊົນໄດ້ກັບມານະມັສການພຣະຢາເວອີກເທື່ອນຶ່ງ.

(ເບິ່ງເພີ່ມເຕີມ: Ahab, Asherah, Elijah, false god, prostitute, Yahweh)


generated on Thu Jul 10 08:45:04 2025

## ປ່ອຍຕົວ

### ນິຍາມ

ຄຳວ່າ "ປ່ອຍຕົວ" ໝາຍຄວາມເຖິງການປະກາດຢ່າງເປັນທາງການວ່າຄົນນັ້ນບໍ່ມີຄວາມຜິດຕາມກົດໝາຍ ຫລື ປະພຶດຜິດສິລະທັມຕາມທີ່ທ່ານຖືກກ່າວຫາ.

- ບາງເທື່ອຄຳນີ້ຖືກໃຊ້ໃນຄັມພີເມື່ອເວົ້າເຖິງເລື່ອງການອະພັຍໂທດຄົນບາບທັ້ງຫຼາຍ.
- ໃນເນື້ອຫາຈະເປັນເລື່ອງຄວາມຜິດພາດໃນການປ່ອຍບຸກຄົນຜູ້ຊຶ່ງເຮັດຊົ່ວຮ້າຍແລະກະບົດຕໍ່ພຣະເຈົ້າ.
- ສາມາດແປໄດ້ອີກວ່າ "ປະກາດວ່າບໍ່ຣິສຸດ" ຫລື "ຕັດສິນວ່າບໍ່ມີຄວາມຜິດ."

## ມົນທິນ, ເຮັດໃຫ້ເປັນມົນທິນ

### ນິຍາມ

ຄຳວ່າ “ມົນທິນ“ ແລະ “ຖືກເຮັດໃຫ້ ເປັນມົນທິນ“ ກ່າວເຖິງການເປີະເປື້ອນຫລືສິກກະປົກ ບາງສິ່ງອາດເປັນມົນທິນໃນຄວາມຮູ້ສຶກທາງ ຮ່າງກາຍ ສິນທັມ ຫລືທາງພິທີກຳ.

- ພຣະເຈົ້າໄດ້ຊົງເຕືອນຊາວອິດສະຣາເອນບໍ່ເຮັດໃຫ້ຕົນເອງເປັນມົນທິນ ດ້ວຍການກິນ ຫລືແຕະຕ້ອງສິ່ງຕ່າງໆ ທີ່ເຂົາປະກາດວ່າເປັນ “ ບໍ່ສອາດ“

ແລະ “ບໍ່ບໍຣິສຸດ“.

- ບາງສິ່ງໂດຍສະເພາະ ເຊັ່ນສັບຄົນຕາຍ ແລະໂລກຕິດຕໍ່ທີ່ຖືກປະກາດວ່າ ໂດຍ ພຣະເຈົ້າໃຫ້ເປັນມົນທິນ ແລະຈະເຮັດໃຫ້ຄົນເປັນມົນ ທິນ ຖ້າພວກເຂົາສຳພັດກັບມັນ.
- ພຣະເຈົ້າສັ່ງໃຫ້ຊາວອິດສະຣາເອນຫລີກລ່ຽງບາບຫາງເພດ.
  ສິ່ງເຫລົ່ານີ້ຈະເຮັດໃຫ້ພວກເຂົາເປັນມົນທິນແລະເຮັດໃຫ້ພວກເຂົາບໍ່ເປັນທີ່ຍອມຮັບຕໍ່ພຣະເຈົ້າ.
- ນອກຈາກນີ້ຍັງມີຂະບວນການທາງຮ່າງກາຍທີ່ເຮັດໃຫ້ຄົນເປັນມົນທິນຊົ່ວຄາວຈົນກວ່າເຂົາຈະກາຍເປັນຄົນບໍ່ຣິສຸດອີກ
- ໃນພຣະຄຳພີໃຫມ່,
  ພຣະເຢຊູເຈົ້າໄດ້ສອນວ່າຄວາມຄິດແລະການກະທຳທີ່ເຮັດໃຫ້ຜິດບາບແມ່ນສິ່ງທີ່ເຮັດໃຫ້ມະນຸດເປັນມົນທິນແທ້ໆ.

### ຄຳແນະນຳ ໃນການແປ

- ຄຳວ່າ “ມົນທິນ“ ຍັງສາມາດແປໄດ້ວ່າ “ສາເຫດທີ່ເຮັດໃຫ້ບໍ່ສະອາດ“ ຫລື “ສາເຫດທີ່ເຮັດໃຫ້ບໍ່ຊອບທຳ“ ຫລື “ສາເຫດທີ່ເຮັດໃຫ້ບໍ່ສາມາດຍອມຮັບໄດ້.
- “ເປັນມົນທິນ“ ຍັງສາມາດແປໄດ້ວ່າ “ກາຍເປັນບໍ່ສະອາດ“ ຫລື “ເປັນສາເຫດເຮັດໃຫ້ບໍ່ເປັນທີ່ຍອມຮັບຫາຍດ້ານສິນທຳ.“

## ລຳບາກ, ຄວາມລຳບາກ

### ນິຍາມ

ຄຳວ່າ "ລຳບາກ" ໝາຍເຖິງການເຮັດໃຫ້ບາງຄົນເຈັບປວດ ຫລືເປັນທຸກ. "ຄວາມລຳບາກ" ເປັນເຊື້ອໂຣກ, ເປັນອາລົມໂສກເສົ້າ, ຫລືອາດເປັນ ຄວາມເສຍຫາຍທີ່ເກີດຈາກອາການນີ້.

- ພຣະເຈົ້າຊົງເຮັດໃຫ້ຄົນຂອງພຣະອົງລຳບາກດ້ວຍຄວາມເຈັບປ່ວຍ ຫລືພົບກັບຄວາມທຸກຍາກອື່ນໆ ເພື່ອເຮັດໃຫ້ພວກເຂົາກັບໃຈຈາກ ຄວາມບາບຂອງພວກເຂົາແລະຫັນກັບມາຫາພຣະອົງ.
- ພຣະເຈົ້າຊົງເຮັດໃຫ້ຄວາມລຳບາກຫລືພັຍພິບັດຕ່າງໆ ມາເຖິງຄົນອີຢົບ ເພາະກະສັດຂອງພວກເຂົາໄດ້ຊົງປະຕິເສດທີ່ຈະເຊື່ອຟັງພຣະ ເຈົ້າ.

### ຄຳແນະນຳໃນການແປ

- ການເຮັດໃຫ້ບາງຄົນລຳບາກອາດແປໄດ້ອີກວ່າ "ທຳໃຫ້ບາງຄົນປະສົບກັບບັນຫາ" ຫລື "ເຮັດໃຫ້ບາງຄົນຕ້ອງທົນທຸກ" ຫລື "ເຮັດໃຫ້ ເກີດການທົນທຸກ."
- ໃນບາງກໍລະນີ ຄຳວ່າ "ລຳບາກ" ອາດແປໄດ້ອີກວ່າ "ເກີດຂຶ້ນແກ່" ຫລື "ມາຍັງ" ຫລື "ນຳການທົນທຸກມາ."
- ໃນເນື້ອຫາເຊັ່ນ "ບາງຄົນທຸກລຳບາກດ້ວຍຂີ້ທູດ" ອາດແປໄດ້ວ່າ "ເຮັດໃຫ້ບາງຄົນເຈັບປ່ວຍດ້ວຍຂີ້ທູດ."


generated on Thu Jul 10 08:45:04 2025

- ເມື່ອໂຣກພັຍ ຫລື ໄພພິບັດຖືກສົ່ງມາໃຫ້ປະຊາຊົນ ຫລື ສັດຕ່າງໆ "ລຳບາກ" ເຮົາອາດຈະແປໄດ້ວ່າ "ເຮັດໃຫ້ລຳບາກ."
- ຄຳວ່າ "ຄວາມທຸກຍາກ" ອາດແປໄດ້ອີກວ່າ "ໄພພິບັດ" ຫລື "ຄວາມເຈັບປ່ວຍ" ຫລື "ການທົນທຸກ" ຫລື "ຄວາມທຸກໃຈອັນໃຫຍ່ຫລວງ" ທັ້ງນີ້ຂຶ້ນຢູ່ກັບກໍລະນີນັ້ນໆ.

(ເບິ່ງເພີ່ມເຕີມ: leprosy, plague, suffer)

## ວັນ ແຫ່ງ ອົງພຣະຜູ້ເປັນເຈົ້າ, ວັນ ແຫ່ງ ພຣະເຈົ້າຢາເວ

### ນິຍາມ

- ຄຳວ່າ " ວັນ ແຫ່ງ ພຣະເຈົ້າຢາເວ" ໃນ ພັນທະສັນຍາເດີມໃຊ້ ເພື່ອ ອ້າງເຖິງເວລາ ທີ່ສະເພາະເຈາະຈົງ ເມື່ອ ພຣະເຈົ້າ ຊົງລົງໂທດໄພ່ພົນ ຂອງ ພຣະອົງ ເພາະຄວາມບາບ ຂອງພວກເຂົາ.
- ຄຳວ່າ " ວັນແຫ່ງອົງພຣະຜູ້ເປັນເຈົ້າ" ໃນພັນທະສັນຍາໃໝ່ມັກ ເວົ້າເຖິງ ວັນ ຫລື ເວລາ ທີ່ພຣະເຢຊູຄຣິສ ຈະສະເດັດກັບມາພິພາກສາ ໄພ່ພົນຂອງພຣະອົງ ເມື່ອເວລາ ວັນສຸດທ້າຍ.
- ສຸດທ້າຍນີ ເວລາ ໃນອານາຄົດ ຂອງ ການພິພາກສ າແລະ ການ ຄືນພະຊົນ ໃນ ບາງຄັ້ງເວົ້າວ່າ" ວັນສຸດທ້າຍ" ເວລານີ ຈະ ເລີ່ມຕົ້ນ ເມື່ອ ພຣະເຢຊູ ອົງພຣະຜູ້ເປັນເຈົ້າ ກັບມາ ພິພາກສາ ພວກຄົນບາບ ແລະ ຈະສ້າງການປົກຄອງ ຂອງພຣະອົງ ຢ່າງຖາວອນ.
- ຄຳວາ (ວັນ) ໃນປະໂຍກນີ້ອາຈອ້າງເຖິງວັນຕາມຕົວອັກສອນຫລືອາຈກ່າວເຖິງ (ເວລາ) ຫລື (ໂອກາດ)ທີ່ຍາວນານກວ່ານຶ່ງວັນ.
- ບາງຄັ້ງ ການລົງໂທດ ມັກເວົ້າເຖິງວ່າ " ຫລັ່ງຄວາມຮ້າຍຂອງພຣະເຈົ້າ" ລົງໃສ່ ບັນດາຄົນທັ່ງຫລາຍ ທີ່ບໍ່ເຊື່ອ.

%ຄຳແນະນຳໃນການແປ

- ວິທີອື່ນໆ ໃນການແປ " ວັນແຫ່ງພຣະເຈົ້າຢາເວ" ອາດລວມເຖິງ "ເວລາ ຂອງພຣະເຈົ້າຢາເວ" ຫລື " ເວລາ ຊຶ່ງພຣະເຈົ້າເວ

ພຣະເຈົ້າຢາເວຈະລົງໂທດພວກສັດຕູຂອງພຣະອົງ"ຫລື"ເວລາແຫ່ງຄວມໂກດຮ້າຍຂອງຂອງພຣະເຈົ້າຢາເວ" ທັ້ງນີ້ຂຶ້ນຢູ່ກັບບໍລິບົດນັ້ນໆ.

- ໃນການແປອື່ນໆ " ເວລາຂອງພຣະຜູ້ເປັນເຈົ້າ" ອາດລວມເຖິງ "ເວລາແຫ່ງການພິພາກສາຂອງອົງພຣະຜູ້ເປັນເຈົ້າ" ຫລື "ເວລາທີ່ພຣະເຢຊູອົງພຣະຜູ້ເປັນເຈົ້າຈະກັບມາພິພາກສາບັນດາໄພ່ພົນຂອງພຣະອົງ.

## ອະທິຖານວິງວອນເພື່ອຄົນອື່ນ, ການອະທິຖານວິງວອນເພື່ອຄົນອື່ນ

### ນິຍາມ

ຄຳວ່າ "ອະທິຖານວິງວອນໃຫ້ຄົນອື່ນ" ແລະ "ການອະທິຖານໃຫ້ຄົນອື່ນ" ອ້າງເຖິງການຂໍຮ້ອງເພື່ອຄົນອື່ນໃນນາມຂອງອີກຄົນໜຶ່ງ ໃນພຣະຄຳພີຄຳນີ້ມັກຈະໝາຍເຖິງການອະທິຖານເພື່ອຄົນອື່ນ

- ຄຳວ່າ "ການອະຖານວິງວອນເພື່ອ" ແລະ "ການອະທິຖານເພື່ອ" ໝາຍເຖິງການຂໍຮ້ອງຕໍ່ພຣະເຈົ້າເພື່ອຜົນປະໂຍດຂອງຄົນອື່ນ
- ພຣະຄຳພີສອນວ່າພຣະວິນຍານບໍຣິສຸດອະທິຖານວິງວອນເພື່ອເຮົາ ນັ້ນຄືພຣະອົງອະທິຖານຕໍ່ພຣະເຈົ້າເພື່ອເຮົາ
- ບຸກຄົນອະທິຖານວິງວອນເພື່ອຄົນອື່ນໂດຍການຮ້ອງຂໍເພື່ອພວກເຂົາຕໍ່ຄົນທີ່ມີສິດທິອຳນາດ

### ຄຳແນະນຳການແປ

- ວິທີອື່ນທີ່ຈະແປ "ອະທິຖານວິງວອນເພື່ອສາມາດໝາຍເຖິງ "ຂໍຮ້ອງກັບ" ຫຼື "ກະຕຸ້ນ"

## ອາບີຢາ

### ຂໍ້ເທັດຈິງ

ອາບີຢາເປັນຊື່ຂອງກະສັດອົງນຶ່ງຂອງຢູດາ ຊຶ່ງຜູ້ປົກຄອງຕັ້ງແຕ່ປີ 915-913 ກຄສ. ພຣະອົງເປັນລູກຊາຍຄົນດຽວຂອງກະສັດເຣໂຫໂບອາມ ໃນພັນທະສັນຍາເດີມມີຜູ້ຊາຍອີກຫລາຍຄົນທີ່ມີຊື່ວ່າ ອາບີຢາ.

- ບຸດຊາຍຂອງຊາມູເອນ ຊື່ອາບີຢາແລະໂຢເອນ ໄດ້ເປັນຜູ້ນຳປະຊາຊົນອິສະຣາເອນທີ່ເບດເຊບາ. ແຕ່ເພາະອາບີຢາແລະນ້ອງຂອງເຂົາບໍ່ສັດຊື່ແລະຮັບສິນບົນ, ປະຊາຊົນຈຶ່ງໄດ້ຮ້ອງຂໍໃຫ້ ຊາມູເອນແຕ່ງຕັ້ງກະສັດໃຫ້ເປັນຜູ້ປົກຄອງພວກເຂົາ.
- ປະໂລຫິດຄົນໜຶ່ງຂອງພຣະວິຫານ ໃນສະໄຫມກະສັດດາວິດຊື່ອາບີຢາ.
- ອາບີຢາເປັນຊື່ຂອງລູກຊາຍຜູ້ໜຶ່ງຂອງກະສັດເຢໂຮໂບອາມ.
- ອາບີຢາເປັນຊື່ຂອງຫົວໜ້າປະໂລຫິດຜູ້ທີ່ກັບຈາກການເປັນຊະເລີຍຂອງຊາວບາບີໂລນມາຍັງກຸງເຢຣູຊາເລັ້ມພ້ອມກັບເຊຣູບາເບນ.


generated on Thu Jul 10 08:45:04 2025

## ອາບີເມເຫລັກ

### ຂໍ້ເທັດຈິງ

ອາບີເມເຫລັກ ເປັນກະສັດຂອງຝີລິດສະຕິນທີ່ປົກຄອງຢູ່ເມືອງເກຣາໃນຂະນະທີ ອັບຣາຮາມ ແລະ ອີຊາກ ອາໃສຢູ່ແຜ່ນດິນການາອານ.

- ອັບຣາຮາມ ໄດ້ຕົວະກະສັດອາບີເມເຫລັກວ່ານາງຊາຣາເປັນນ້ອງສາວຂອງເພິ່ນແທນທີ່ຈະບອກວ່າເປັນເມຍ.
- ອັບຣາຮາມແລະອາບີເມເຫລັກໄດ້ເຮັດຂໍ້ຕົກລົງກັນເລື່ອງສິດການເປັນເຈົ້າຂອງນ້ຳສ້າງທີ່ເບເອນເຊບາ.
- ຫລາຍປີຕໍ່ມາ, ອີຊາກກໍໄດ້ຕົວະອາບີເມເຫລັກແລະຜູ້ຊາຍທັ້ງຫລາຍໃນເມືອງເກຣາວ່ານາງເຣເບກາເປັນນ້ອງສາວ, ບໍ່ແມ່ນເມຍ.
- ກະສັດອາບີເມເຫລັກໄດ້ຕຳນິອັບຣາຮາມ ແລະອີຊາກໃນເລື່ອງການຕົວະເພິ່ນ.
- ລູກຊາຍຜູ້ໜຶ່ງຂອງກິເດໂອນມີຊື່ວ່າອາບີເມເຫລັກແລະລາວເປັນອ້າຍຂອງໂຢທາມ. ພຣະຄຳພີບາງສະບັບອາດຈະສະກົດຊື່ຂອງເຂົາ ແຕກຕ່າງກັນເລັກນ້ອຍເພື່ອເຮັດໃຫ້ແຕກຕ່າງຈາກຊື່ກະສັດອາບີເມເຫລັກ.

## ອາຮີຢາ

### ຂໍ້ເທັດຈິງ

ອາຮີຢາເປັນຊື່ຂອງຫລາຍຄົນແຕກຕ່າງກັນໃນພຣະສັນຍາເດີມ ດັ່ງຕໍ່ໄປນີ້:

- ອາຮີຢາເປັນຊື່ຂອງປະໂຣຫິດໃນສະໄໝຂອງຊາອູນ.
- ອາຮີຢາເປັນຊື່ຂອງເລຂານຸການໃນສະໄໝຂອງກະສັດໂຊໂລໂມນ.
- ອາຮີຢາເປັນຊື່ຂອງຜູ້ປະກາດພຣະຄຳ ທ່ານນຶ່ງຈາກຊີໂລ ເພິ່ນເປັນຜູ້ທຳນວາຍວ່າຊົນຊາດອິສະຣາເອນຈະຖືກແບ່ງແຍກອອກເປັນສອງອານາຈັກ.
- ບິດາຂອງກະສັດບາອາຊາແຫ່ງອິສະຣາເອນກໍມີຊື່ວ່າ ອາຮີຢາ.

(ເບິ່ງເພີ່ມເຕີມ: Baasha, Shiloh)

## ອາຮາຊີຢາ

### ຂໍ້ເທັດຈິງ

ອາຮາຊີຢາ ເປັນຊື່ຂອງກະສັດສອງອົງ: ອົງນຶ່ງປົກຄອງອິສະຣາເອນ ແລະອີກອົງນຶ່ງປົກຄອງຢູດາ.

- ກະສັດອາຮາຊີຢາແຫ່ງຢູດາເປັນບຸດຂອງກະສັດເຢໂຮຣາມ; ເພິ່ນໄດ້ປົກຄອງເປັນເວລານຶ່ງປີ (ປີ 841 ກ. ຄ.ສ.) ແລ້ວຖືກ ເຢຮູ ຜູ້ເປັນລູກຂອງອາຮາຊີຢາຂ້າຕາຍ. ໃນທີ່ສຸດໂຢອາດໄດ້ຂຶ້ນມາເປັນກະສັດແທນ.
- ກະສັດອາຮາຊີຢາແຫ່ງອິສະຣາເອນ ເປັນລູກຂອງກະສັດອາຮາຍ. ທ່ານປົກຄອງເປັນເວລາສອງປີ (850-849 ກ.ຄ.ສ). ອາຮາຊີຢາຕາຍຈາກບາດແຜເພາะເພິ່ນລົ້ມຢູ່ໃນພຣະຣາຊວັງ ແລະໂຢຣາມຜູ້ເປັນນ້ອງໄດ້ເປັນກະສັດແທນ.

(ເບິ່ງເພີ່ມເຕີມ: Jehu, Ahab, Jeroboam, Joash)

## ບັນຊາ

### ນິຍາມ

ບັນຊາ ແມ່ນ ຄຳປະກາດ ຫລື ກົດໝາຍ ທີ ປະກາດ ຕໍ່ປະຊາຊົນທຸກຄົນ.

- ພຣະບັນຍັດ ຂອງພຣະເຈົ້າ ເອີ້ນວ່າ ພຣະບັນຊາ, ກົດເກນ, ຫລື ພຣະບັນຍັດ.
- ເຊັ່ນດຽວ ກັບ ກົດໝາຍ ແລະ ຄຳສັ່ງ, ຕ່າງໆ ພຣະບັນຊາ ຕ້ອງມີການເຊື່ອຟັງ.
- ຕົວຢ່າງ ຂອງຄຳສັ່ງ ຂອງຜູ້ປົກຄອງ ທີ່ເປັນມະນຸດ ຄືຄຳປະກາດ ຂອງຈັກກະພັດ ຊີຊາ ອໍກູດໂຕ ທີ່ທຸກຄົນ ທີ່ອາໄສ ຢູ່ໃນຈັກກະພັດ ໂຣມ ຕ້ອງ ກັບໄປ ບ້ານເກີດຂອງຕົນ ເພື່ອການສຳຣວດສຳມະໂນຄົວ ປະຊາຊົນ.
- ຄຳສັ່ງ ບາງຢ່າງ ໝາຍເຖິງ ການສັ່ງ ທີ່ຕ້ອງເຊື່ອຟັງ ຊຶ່ງອາຈແປໄດ້ວ່າ "ສັ່ງ" ຫລື "ອອກຄຳສັ່ງ" ຫລື " ເພື່ອໃຫ້ເປັນທາງການ" ຫລື ເພື່ອປະກາດຕໍ່ ສາທາຣະນະຊົນ ເປັນກົດໝາຍ".
- ສຶ່ງທີ" ສັ່ງແລ້ວ" ຈະເກີດຂຶ້ນ ໝາຍຄວາມວ່າ " ຈະເກີດຂຶ້ນແນ່ນອນ " ຫລື " ໄດ້ຮັບການຕັດສິນໃຈແລ້ວແລະຈະມີການປ່ຽນແປງ" ຫລື " ປະກາດຢ່າງແນ່ນອນ ວ່າເລື່ອງນີ້ຈະເກີດຂຶ້ນ".)


generated on Thu Jul 10 08:45:04 2025

## ຫນ້າລັງກຽດ, ຫນ້າກຽດຫນ້າຊັ່ງ

### ນິຍາມ

ຄໍາວ່າ "ຫນ້າລັງກຽດ" ໃຊ້ກ່າວເຖິງບາງສິ່ງທີ່ເຮັດໃຫ້ໜ້າກຽດ ຫລືບໍ່ເຫັນຊອບທີ່ສຸດ.

- ຄົນອີຢິບຖືວ່າຄົນເຮັບເຣີ "ຫນ້າລັງກຽດ" ນີ້ຄືໝາຍຄວາມວ່າຄົນອີຢິບບໍ່ມັກຄົນເຮັບເຣີ ແລະບໍ່ຕ້ອງການຄົບຄ້າສາມະຄົມຫລືຢູ່ໃກ້ໆ ພວກເຂົາ.
- ບາງສິ່ງທີ່ພຣະຄໍາພີເວົ້າວ່າ "ສິ່ງທີ່ຫນ້າລັງກຽດຕໍ່ພຣະເຈົ້າ" ລວມເຖິງ ການຕົວະ, ການອວດຕົວ,ການຖວາຍມະນຸດເປັນເຄື່ອງບູຊາ, ການລ່ວງປະເວນີແລະການຮັກຄົນເພດດຽວກັນ.
- ໃນການສອນເລື່ອງຍຸກສຸດທ້າຍ, ບັນດາສາວົກຂອງພຣະເຢຊູໄດ້ອ້າງເຖິງຄໍາພະຍາກອນຂອງຜູ້ປະກາດພຣະຄໍາ ດານີເອນກ່ຽວກັບສິ່ງ "ຫນ້າລັງກຽດອັນໜ້າຢ້ານ" ທີ່ຈະຖືກກໍ່ຕັ້ງຂຶ້ນ ຊຶ່ງເປັນເໝືອນການກະບົດຕໍ່ ພຣະເຈົ້າ, ທັ້ງເຮັດໃຫ້ບ່ອນນະມັດສະການຂອງພຣະອົງ ເປັນມົນທິນ.

### ຄໍາແນະນໍາໃນການແປ

ຄໍາວ່າ "ຫນ້າລັງກຽດ" ສາມາດແປໄດ້ອີກວ່າ "ບາງສິ່ງທີ່ພຣະເຈົ້າກຽດຊັ່ງ" ຫລື "ບາງສິ່ງທີ່ໜ້າລັງກຽດ" ຫລື "ການກະທໍາທີ່ໜ້າລັງກຽດ" ຫລື"ຊົ່ວຮ້າຍທີ່ສຸດ."

- ອີງຕາມເນື້ອຫານີ້ອາດຈະແປວ່າ "ຫນ້າລັງກຽດຕໍ່" ອາດຈະລວມເຖິງ "ໜ້າກຽດທີ່ສຸດ" ຫລື "ໜ້າກຽດຕໍ່" ຫລື "ເປັນສິ່ງທີ່ຮັບບໍ່ໄດ້" ຫລື "ເຮັດໃຫ້ໜ້າກຽດຊັ່ງທີ່ສຸດ."
- ຈາກເນື້ອຫານີ້ "ຫນ້າລັງກຽດອັນໜ້າຢ້ານ" ອາດຈະແປໄດ້ອີກວ່າ "ສິ່ງທີ່ເປັນມົນທິນທີ່ຈະເຮັດໃຫ້ປະຊາຊົນໄດ້ຮັບອັນຕະລາຍຢ່າງ ຮ້າຍ ແຮງ" ຫລື "ສິ່ງທີ່ໜ້າກຽດທີ່ເຮັດໃຫ້ເກີດຄວາມໂສກເສົ້າຢ່າງຫລວງຫລາຍ."

---


generated on Thu Jul 10 08:45:04 2025